THE BOOK OF MORMON

LAO – ENGLISH PARALLEL EDITION

Version 2, published April 2025. *bencrowder.net/book-of-mormon-parallel-edition/*

This parallel edition © 2025 Benjamin Crowder. All rights reserved. You have permission to print this document for your own use. For other uses, send requests to *ben.crowder@gmail.com*.

Text of the Book of Mormon © 2025 Intellectual Reserve, Inc. All rights reserved.

The text of this edition is licensed from The Church of Jesus Christ of Latter-day Saints with the following disclaimer: *The Product offered by Benjamin Crowder is neither made, provided, approved, nor endorsed by, Intellectual Reserve, Inc. or The Church of Jesus Christ of Latter-day Saints. Any content or opinions expressed, implied, or included in or with the Product offered by Benjamin Crowder are solely those of Benjamin Crowder and not those of Intellectual Reserve, Inc. or The Church of Jesus Christ of Latter-day Saints.*

ພຣະຄຳພີມໍມອນ

ເລື່ອງລາວທີ່ຂຽນໄວ້ດ້ວຍ ມືຂອງມໍມອນ ໃນແຜ່ນຈາລຶກ ທີ່ໄດ້ມາຈາກແຜ່ນຈາລຶກ ຂອງນີໄຟ

ດັ່ງນັ້ນ ພຣະຄຳພີນີ້ຈຶ່ງເປັນຄວາມຫຍໍ້ມາຈາກບັນທຶກຂອງຜູ້ຄົນຊາວນີໄຟ ແລະ ຂອງຊາວເລມັນນຳອີກ—ຂຽນເຖິງຊາວເລມັນຜູ້ເປັນສ່ວນໜຶ່ງທີ່ເຫລືອຢູ່ຂອງເຊື້ອສາຍອິດສະຣາເອນ ແລະ ເຖິງຊາວຢິວ ແລະ ຄົນຕ່າງຊາດນຳອີກ—ຂຽນໂດຍພຣະບັນຍັດ ແລະ ໂດຍພຣະວິນຍານແຫ່ງການທຳນາຍ ແລະ ຂອງການເປີດເຜີຍ ຊຶ່ງຂຽນ ແລະ ຜະນຶກ ແລະ ເຊື່ອງໄວ້ກັບພຣະຜູ້ເປັນເຈົ້າ ເພື່ອຈະບໍ່ໄດ້ຖືກທຳລາຍ—ເພື່ອຈະໄດ້ນຳອອກມາໂດຍຂອງປະທານ ແລະ ໂດຍອຳນາດຂອງພຣະເຈົ້າ ເພື່ອການແປພຣະຄຳນີ້—ຜະນຶກໄວ້ໂດຍມືຂອງ�โมโรไน ແລະ ເຊື່ອງໄວ້ກັບພຣະຜູ້ເປັນເຈົ້າ ເພື່ອຈະນຳອອກມາໃນເວລາອັນເໝາະສົມໂດຍທາງຄົນຕ່າງຊາດ—ການແປພຣະຄຳພີນີ້ສຳເລັດໄດ້ໂດຍຂອງປະທານຂອງພຣະເຈົ້າ.

ຄວາມຫຍໍ້ທີ່ເອົາມາຈາກໜັງສືອີເທີມີຢູ່ພ້ອມ ເປັນບັນທຶກຂອງຜູ້ຄົນຂອງເຜົ່າຢາເຣັດ ຊຶ່ງກະຈັດກະຈາຍໄປໃນເວລາທີ່ພຣະຜູ້ເປັນເຈົ້າໄດ້ກະທຳໃຫ້ພາສາຂອງມະນຸດສັບສົນເມື່ອເວລາຄົນເຫລົ່ານັ້ນກຳລັງສ້າງຫໍສູງ ເພື່ອຂຶ້ນໄປໃຫ້ເຖິງສະຫວັນ—ອັນເປັນໄປເພື່ອສະແດງແກ່ຜູ້ທີ່ເຫລືອຢູ່ຂອງເຊື້ອສາຍອິດສະຣາເອນວ່າ ພຣະຜູ້ເປັນເຈົ້າໄດ້ກະທຳສິ່ງທີ່ຍິ່ງໃຫຍ່ອັນໃດແດ່ເພື່ອບັນພະບຸລຸດຂອງພວກເຂົາ ແລະ ເພື່ອພວກເຂົາຈະໄດ້ຮູ້ຈັກພັນທະສັນຍາຂອງພຣະຜູ້ເປັນເຈົ້າວ່າ ພວກເຂົາຈະບໍ່ຖືກປະຖິ້ມຕະຫລອດການ—ແລະ ເພື່ອໃຫ້ຊາວຢິວ ແລະ ຄົນຕ່າງຊາດຮັບຮູ້ວ່າພຣະເຢຊູຄື ພຣະຄຣິດ ພຣະເຈົ້າ ຜູ້ສະຖິດນິລັນດອນ ຜູ້ຊຶ່ງສະແດງພຣະອົງເອງໃຫ້ປະຈັກແກ່ປະຊາຊາດທັງປວງ—ແລະ ບັດນີ້ຖ້າຫາກຈະມີສິ່ງທີ່ຂາດຕົກບົກພ່ອງກໍເປັນຄວາມຜິດຂອງມະນຸດ; ດັ່ງນັ້ນ ຈົ່ງຢ່າກ່າວໂທດເລື່ອງຂອງພຣະເຈົ້າເພື່ອທ່ານຈະໄດ້ພົບວ່າບໍ່ມີມົນທິນທີ່ບັນລັງພິພາກສາຂອງພຣະຄຣິດ.

ສະບັບຕົ້ນຈາກແຜ່ນຈາລຶກຖືກແປເປັນພາສາອັງກິດ ໂດຍ ໂຈເຊັບ ສະມິດ, ຜູ້ລູກ

The Book of Mormon

An Account Written by the Hand of Mormon upon Plates Taken from the Plates of Nephi

Wherefore, it is an abridgment of the record of the people of Nephi, and also of the Lamanites—Written to the Lamanites, who are a remnant of the house of Israel; and also to Jew and Gentile—Written by way of commandment, and also by the spirit of prophecy and of revelation—Written and sealed up, and hid up unto the Lord, that they might not be destroyed—To come forth by the gift and power of God unto the interpretation thereof—Sealed by the hand of Moroni, and hid up unto the Lord, to come forth in due time by way of the Gentile—The interpretation thereof by the gift of God.

An abridgment taken from the Book of Ether also, which is a record of the people of Jared, who were scattered at the time the Lord confounded the language of the people, when they were building a tower to get to heaven—Which is to show unto the remnant of the house of Israel what great things the Lord hath done for their fathers; and that they may know the covenants of the Lord, that they are not cast off forever—And also to the convincing of the Jew and Gentile that Jesus is the Christ, the Eternal God, manifesting himself unto all nations—And now, if there are faults they are the mistakes of men; wherefore, condemn not the things of God, that ye may be found spotless at the judgment-seat of Christ.

TRANSLATED BY JOSEPH SMITH, JUN.

ປະຈັກພະຍານຂອງພະຍານສາມຄົນ

ຂໍໃຫ້ເປັນທີ່ຮູ້ຈັກແກ່ທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງແກ່ຜູ້ທີ່ວຽກງານນີ້ຈະມາເຖິງວ່າ: ໂດຍທາງພຣະຄຸນຂອງພຣະເຈົ້າອົງເປັນພຣະບິດາ ແລະ ອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ, ພວກເຮົາຈຶ່ງໄດ້ເຫັນແຜ່ນຈາລຶກຊຶ່ງມີບັນທຶກນີ້ຢູ່, ຊຶ່ງເປັນບັນທຶກຂອງຜູ້ຄົນຂອງຊາວນີໄຟ ແລະ ຂອງຊາວເລມັນ, ຊຶ່ງເປັນພີ່ນ້ອງຂອງພວກເຂົາເອງ, ແລະ ຂອງຜູ້ຄົນຂອງຊາວຢາເຣັດ ຊຶ່ງເປັນຜູ້ມາຈາກຫໍສູງທີ່ກ່າວເຖິງ ແລະ ພວກເຮົາຮູ້ອີກວ່າ ມັນຖືກແປອອກມາໂດຍຂອງປະທານ ແລະ ອຳນາດຂອງພຣະເຈົ້າ ເພາະສຸລະສຽງຂອງພຣະອົງໄດ້ປະກາດມັນໃຫ້ພວກເຮົາຮູ້. ດັ່ງນັ້ນ ພວກເຮົາຈຶ່ງຮູ້ແນ່ນອນວ່າ ວຽກງານນີ້ເປັນຄວາມຈິງ ແລະ ພວກເຮົາຂໍເປັນພະຍານອີກວ່າ ພວກເຮົາໄດ້ເຫັນອັກຂະລະ ຊຶ່ງຢູ່ໃນແຜ່ນຈາລຶກນັ້ນ ແລະ ມັນຖືກສະແດງແກ່ພວກເຮົາໂດຍອຳນາດຂອງພຣະເຈົ້າ ແລະ ບໍ່ແມ່ນຂອງມະນຸດ. ພວກເຮົາປະກາດດ້ວຍຖ້ອຍຄຳທີ່ມີສະຕິສຳປະຊັນຍະວ່າ ທູດອົງໜຶ່ງຂອງພຣະເຈົ້າໄດ້ລົງມາຈາກສະຫວັນ ແລະ ເພີ່ນໄດ້ນຳມັນມາວາງຢູ່ຕໍ່ໜ້າຂອງພວກເຮົາ, ວ່າພວກເຮົາເຫັນ ແລະ ເບິ່ງແຜ່ນຈາລຶກ ແລະ ອັກຂະລະທີ່ຢູ່ໃນນັ້ນ, ແລະ ພວກເຮົາຮູ້ວ່າໂດຍພຣະຄຸນຂອງພຣະເຈົ້າອົງເປັນພຣະບິດາ ແລະ ອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ, ພວກເຮົາຈຶ່ງເຫັນ ແລະ ເປັນພະຍານວ່າ ສິ່ງເຫລົ່ານີ້ເປັນຄວາມຈິງ ແລະ ເປັນສິ່ງທີ່ອັດສະຈັນຕໍ່ສາຍຕາຂອງພວກເຮົາ. ຢ່າງໃດກໍຕາມ ສຸລະສຽງຂອງພຣະຜູ້ເປັນເຈົ້າໄດ້ບັນຊາພວກເຮົາໃຫ້ເປັນພະຍານເຖິງສິ່ງເຫລົ່ານີ້; ດັ່ງນັ້ນ ເພື່ອປະຕິບັດຕາມພຣະບັນຍັດຂອງພຣະເຈົ້າ, ພວກເຮົາຈຶ່ງສະແດງປະຈັກພະຍານເຖິງສິ່ງເຫລົ່ານີ້ ແລະ ພວກເຮົາຮູ້ວ່າ ຖ້າຫາກພວກເຮົາມີສັດທາໃນພຣະຄຣິດ, ແລ້ວພວກເຮົາຈະກຳຈັດເລືອດຂອງມະນຸດທັງປວງອອກຈາກອາພອນຂອງພວກເຮົາ ແລະ ຈະຖືກພົບວ່າບໍ່ມີມົນທິນຢູ່ຕໍ່ໜ້າບັນລັງພິພາກສາຂອງພຣະຄຣິດ ແລະ ຈະຢູ່ກັບພຣະອົງໃນຟ້າສະຫວັນຊົ່ວນິລັນດອນ ແລະ ຂໍເທີດທູນພຣະກຽດຕິຍົດແດ່ພຣະບິດາ ແລະ ແດ່ພຣະບຸດ ແລະ ແດ່ພຣະວິນຍານບໍລິສຸດ ຊຶ່ງເປັນພຣະເຈົ້າອົງດຽວກັນ, ອາແມນ.

ອໍລີເວີ ຄາວເດີຣີ
ເດວິດ ວິດເມີ
ມາຕິນ ແຮຣິສ

The Testimony of Three Witnesses

Be it known unto all nations, kindreds, tongues, and people, unto whom this work shall come: That we, through the grace of God the Father, and our Lord Jesus Christ, have seen the plates which contain this record, which is a record of the people of Nephi, and also of the Lamanites, their brethren, and also of the people of Jared, who came from the tower of which hath been spoken. And we also know that they have been translated by the gift and power of God, for his voice hath declared it unto us; wherefore we know of a surety that the work is true. And we also testify that we have seen the engravings which are upon the plates; and they have been shown unto us by the power of God, and not of man. And we declare with words of soberness, that an angel of God came down from heaven, and he brought and laid before our eyes, that we beheld and saw the plates, and the engravings thereon; and we know that it is by the grace of God the Father, and our Lord Jesus Christ, that we beheld and bear record that these things are true. And it is marvelous in our eyes. Nevertheless, the voice of the Lord commanded us that we should bear record of it; wherefore, to be obedient unto the commandments of God, we bear testimony of these things. And we know that if we are faithful in Christ, we shall rid our garments of the blood of all men, and be found spotless before the judgment-seat of Christ, and shall dwell with him eternally in the heavens. And the honor be to the Father, and to the Son, and to the Holy Ghost, which is one God. Amen.

Oliver Cowdery
David Whitmer
Martin Harris

ປະຈັກພະຍານຂອງພະຍານແປດຄົນ

ຂໍໃຫ້ເປັນທີ່ຮູ້ຈັກແກ່ທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ ແກ່ຜູ້ທີ່ວຽກງານນີ້ຈະມາເຖິງວ່າ: ໂຈເຊັບ ສະມິດ ຜູ້ລູກ ຜູ້ແປວຽກງານນີ້ໄດ້ສະແດງແຜ່ນຈາລຶກທີ່ກ່າວເຖິງຕໍ່ພວກເຮົາ ຊຶ່ງເບິ່ງແລ້ວເປັນຄຳ ແລະ ຫລາຍຕໍ່ຫລາຍແຜ່ນ ສະມິດຜູ້ນີ້ແປແລ້ວ ພວກເຮົາໄດ້ຈັບບາຍດ້ວຍມືຂອງພວກເຮົາ ແລະ ພວກເຮົາໄດ້ເຫັນອັກຂະລະຢູ່ໃນແຜ່ນນັ້ນອີກ ຊຶ່ງທັງໝົດນັ້ນເບິ່ງແລ້ວເປັນວຽກງານຂອງສະໄໝບູຮານ ແລະ ເປັນຝີມືທີ່ແປກປະຫລາດ ແລະ ການນີ້ພວກເຮົາເປັນພະຍານດ້ວຍຖ້ອຍຄຳທີ່ມີສະຕິສຳປະຊັນຍະວ່າ ສະມິດຜູ້ນີ້ສະແດງຕໍ່ພວກເຮົາ ເພາະພວກເຮົາໄດ້ເຫັນ ແລະ ຈັບຍົກຂຶ້ນ ແລະ ຮູ້ແນ່ນອນว่า ສະມິດຜູ້ນີ້ມີແຜ່ນຈາລຶກທີ່ພວກເຮົາກ່າວເຖິງ ແລະ ພວກເຮົາໃຫ້ຊື່ຂອງພວກເຮົາໄວ້ຕໍ່ໂລກເພື່ອເປັນພະຍານຕໍ່ໂລກເຖິງສິ່ງທີ່ພວກເຮົາໄດ້ເຫັນ ແລະ ພຣະເຈົ້າເປັນພະຍານว่า ພວກເຮົາບໍ່ໄດ້ເວົ້າຕົວະ.

The Testimony of Eight Witnesses

Be it known unto all nations, kindreds, tongues, and people, unto whom this work shall come: That Joseph Smith, Jun., the translator of this work, has shown unto us the plates of which hath been spoken, which have the appearance of gold; and as many of the leaves as the said Smith has translated we did handle with our hands; and we also saw the engravings thereon, all of which has the appearance of ancient work, and of curious workmanship. And this we bear record with words of soberness, that the said Smith has shown unto us, for we have seen and hefted, and know of a surety that the said Smith has got the plates of which we have spoken. And we give our names unto the world, to witness unto the world that which we have seen. And we lie not, God bearing witness of it.

ຄຣິດສະຕຽນ ວິດເມີ	Christian Whitmer
ເຈກັບ ວິດເມີ	Jacob Whitmer
ພີເຕີ ວິດເມີ, ຜູ້ລູກ	Peter Whitmer, Jun.
ຈອນ ວິດເມີ	John Whitmer
ໄຮຣຳ ເພຈ໌	Hiram Page
ໂຈເຊັບ ສະມິດ, ຜູ້ພໍ່	Joseph Smith, Sen.
ໄຮຣຳ ສະມິດ	Hyrum Smith
ແຊມໂຍ ເອັຈ ສະມິດ	Samuel H. Smith

ໜັງສືນີໄຟສະບັບທີໜຶ່ງ

ການປົກຄອງ ແລະ ການປະຕິບັດ ສາດສະໜາກິດຂອງເພີ່ນ

ເລື່ອງລາວຂອງລີໄຮ ແລະ ຊາໄຣຢາ ພັນລະຍາຂອງເພີ່ນພ້ອມດ້ວຍລູກຊາຍສີ່ຄົນ ທີ່ມີຊື່ວ່າ (ເລີ່ມຕົ້ງແຕ່ລູກກົກ) ເລມັນ, ເລມູເອນ, ແຊມ, ແລະ ນີໄຟ. ພຣະຜູ້ເປັນເຈົ້າໄດ້ເຕືອນລີໄຮໃຫ້ອອກຈາກແຜ່ນດິນເຢຣູຊາເລັມເພາະເພີ່ນທຳນາຍແກ່ຜູ້ຄົນກ່ຽວກັບຄວາມຊົ່ວຮ້າຍຂອງພວກເຂົາ ແລະ ພວກເຂົາພະຍາຍາມທຳລາຍຊີວິດຂອງເພີ່ນ. ເພີ່ນເດີນທາງສາມວັນເຂົ້າໄປໃນຖິ່ນແຫ້ງແລ້ງກັນດານກັບຄອບຄົວຂອງເພີ່ນ. ນີໄຟພາພວກອ້າຍກັບໄປແຜ່ນດິນເຢຣູຊາເລັມເພື່ອຕາມເອົາບັນທຶກຂອງຊາວຢິວ. ເລື່ອງລາວກ່ຽວກັບຄວາມທຸກທໍລະມານຂອງເຂົາເຈົ້າ. ເຂົາເຈົ້າໄດ້ລູກສາວຂອງອິດຊະມາເອນມາເປັນເມຍ. ເຂົາເຈົ້າພາຄອບຄົວອອກໄປໃນຖິ່ນແຫ້ງແລ້ງກັນດານ. ຄວາມທຸກທໍລະມານ ແລະ ຄວາມທຸກຂອງເຂົາເຈົ້າໃນຖິ່ນແຫ້ງແລ້ງກັນດານ. ການເດີນທາງຂອງເຂົາເຈົ້າ. ເຂົາເຈົ້າມາເຖິງຜືນນ້ຳອັນກວ້າງໃຫຍ່. ພວກອ້າຍຂອງນີໄຟກະບົດຕໍ່ລາວ. ລາວເຮັດໃຫ້ພວກເຂົາຍອມຈຳນົນ ແລະ ສ້າງເຮືອລຳໜຶ່ງ. ເຂົາເຈົ້າເອີ້ນບ່ອນນັ້ນວ່າ ອຸດົມສົມບູນ. ເຂົາເຈົ້າຂ້າມຜືນນ້ຳອັນກວ້າງໃຫຍ່ໄປສູ່ແຜ່ນດິນແຫ່ງຄຳສັນຍາ ແລະ ອື່ນໆ. ທັງນີ້ເປັນໄປຕາມເລື່ອງລາວຂອງນີໄຟ ຫລື ອີກຄຳໜຶ່ງ ຂ້າພະເຈົ້ານີໄຟເປັນຜູ້ຂຽນບັນທຶກນີ້.

๑ ນີໄຟ ๑

๑ ຂ້າພະເຈົ້າ ນີໄຟທີ່ໄດ້ເກີດຈາກ ບິດາມານດາ ຜູ້ປະເສີດ, ສະນັ້ນ ຂ້າພະເຈົ້າຈຶ່ງໄດ້ຮັບການ ສິດສອນມາແດ່ແລ້ວ ໃນສິ່ງທີ່ຮຽນຮູ້ທັງໝົດຂອງບິດາຂອງຂ້າພະເຈົ້າ ແລະ ໂດຍທີ່ເຫັນ ຄວາມທຸກຫລາຍຢ່າງໃນວັນເວລາຂອງຂ້າພະເຈົ້າ ເຖິງຢ່າງໃດກໍຕາມ ໂດຍເປັນທີ່ໂປດປານຂອງພຣະຜູ້ເປັນເຈົ້າຕະຫລອດວັນເວລາຂອງຂ້າພະເຈົ້າ, ແທ້ຈິງແລ້ວ, ໂດຍທີ່ມີຄວາມຮູ້ຢ່າງໃຫຍ່ຫລວງເຖິງພຣະກະລຸນາທິຄຸນ ແລະ ຄວາມລຶກລັບຂອງພຣະເຈົ້າ, ສະນັ້ນ ຂ້າພະເຈົ້າຈຶ່ງເຮັດ ບັນທຶກກ່ຽວກັບການ ປະຕິບັດງານຂອງຂ້າພະເຈົ້າໃນວັນເວລາຂອງຂ້າພະເຈົ້າ.

๘ ແທ້ຈິງແລ້ວ, ຂ້າພະເຈົ້າເຮັດບັນທຶກເປັນ ພາສາຂອງບິດາ ຂອງຂ້າພະເຈົ້າ ຊຶ່ງປະກອບດ້ວຍສິ່ງທີ່ຮຽນຮູ້ຂອງຊາວຢິວ ແລະ ພາສາຂອງຊາວເອຢິບ.

The First Book of Nephi

His Reign and Ministry

An account of Lehi and his wife Sariah, and his four sons, being called, (beginning at the eldest) Laman, Lemuel, Sam, and Nephi. The Lord warns Lehi to depart out of the land of Jerusalem, because he prophesieth unto the people concerning their iniquity and they seek to destroy his life. He taketh three days' journey into the wilderness with his family. Nephi taketh his brethren and returneth to the land of Jerusalem after the record of the Jews. The account of their sufferings. They take the daughters of Ishmael to wife. They take their families and depart into the wilderness. Their sufferings and afflictions in the wilderness. The course of their travels. They come to the large waters. Nephi's brethren rebel against him. He confoundeth them, and buildeth a ship. They call the name of the place Bountiful. They cross the large waters into the promised land, and so forth. This is according to the account of Nephi; or in other words, I, Nephi, wrote this record.

1 Nephi 1

I, Nephi, having been born of goodly parents, therefore I was taught somewhat in all the learning of my father; and having seen many afflictions in the course of my days, nevertheless, having been highly favored of the Lord in all my days; yea, having had a great knowledge of the goodness and the mysteries of God, therefore I make a record of my proceedings in my days.

Yea, I make a record in the language of my father, which consists of the learning of the Jews and the language of the Egyptians.

ມ ແລະ ຂ້າພະເຈົ້າຮູ້ດີວ່າ ບັນທຶກທີ່ຂ້າພະເຈົ້າກະທຳນັ້ນເປັນ ຄວາມຈິງ ເພາະຂ້າພະເຈົ້າເຮັດມັນດ້ວຍມືຂອງຂ້າພະເຈົ້າ ແລະ ເຮັດຕາມຄວາມຮູ້ຂອງຂ້າພະເຈົ້າເອງ.

And I know that the record which I make is true; and I make it with mine own hand; and I make it according to my knowledge.

ຫ ເພາະເຫດການໄດ້ບັງເກີດຂຶ້ນໃນໄລຍະເລີ່ມຕົ້ນປີ ທຳອິດ ຂອງການປົກຄອງຂອງ ເຊເດກີຢາ ກະສັດແຫ່ງຢູດາ (ລີໄຮບິດາ ຂອງຂ້າພະເຈົ້າຢູ່ໃນ ເຢຣູຊາເລັມຕະຫລອດວັນເວລາຂອງເພິ່ນ) ແລະ ໃນປີດຽວກັນນັ້ນ ໄດ້ມີ ສາດສະດາຫລາຍທ່ານມາທຳນາຍ ຕໍ່ຜູ້ຄົນວ່າ ພວກເຂົາຕ້ອງກັບໃຈ ຖ້າບໍ່ດັ່ງນັ້ນ ມະຫານະຄອນ ເຢຣູຊາເລັມຈະຕ້ອງຖືກທຳລາຍ.

For it came to pass in the commencement of the first year of the reign of Zedekiah, king of Judah, (my father, Lehi, having dwelt at Jerusalem in all his days); and in that same year there came many prophets, prophesying unto the people that they must repent, or the great city Jerusalem must be destroyed.

ຫ ດັ່ງນັ້ນ ເຫດການໄດ້ບັງເກີດຂຶ້ນຄື ລີໄຮບິດາຂອງຂ້າພະເຈົ້າ ເມື່ອເພິ່ນອອກໄປອະທິຖານຫາພຣະຜູ້ເປັນເຈົ້າ, ແທ້ຈິງແລ້ວ, ແມ່ນອ້ອນວອນດ້ວຍສຸດ ໃຈ ເພື່ອຜູ້ຄົນຂອງເພິ່ນ.

Wherefore it came to pass that my father, Lehi, as he went forth prayed unto the Lord, yea, even with all his heart, in behalf of his people.

ຫ ແລະ ເຫດການໄດ້ບັງເກີດຂຶ້ນເມື່ອເພິ່ນອະທິຖານຫາພຣະຜູ້ ເປັນເຈົ້າຢູ່ນັ້ນ, ມີ ເລົາໄຟມາສະຖິດຢູ່ເທິງກ້ອນຫີນຊື່ໜ້າຂອງ ເພິ່ນ; ແລະ ເພິ່ນກໍໄດ້ເຫັນ ແລະ ໄດ້ຍິນຫລາຍເລື່ອງ; ເພາະສິ່ງ ທີ່ເພິ່ນເຫັນ ແລະ ໄດ້ຍິນມານັ້ນ ຈຶ່ງເຮັດໃຫ້ຕົວຂອງເພິ່ນມີ ຄວາມສະທ້ານຫວັ່ນໄຫວ ແລະ ສັ່ນຢ່າງຍິ່ງ.

And it came to pass as he prayed unto the Lord, there came a pillar of fire and dwelt upon a rock before him; and he saw and heard much; and because of the things which he saw and heard he did quake and tremble exceedingly.

ສ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນໄດ້ກັບມາບ້ານຂອງ ເພິ່ນເອງ ທີ່ເມືອງເຢຣູຊາເລັມ; ແລະ ໄດ້ລົ້ມຕົວລົງເທິງ ຕຽງນອນຂອງເພິ່ນຢ່າງ ໝົດກຳລັງດ້ວຍພຣະວິນຍານ ແລະ ສິ່ງທີ່ເພິ່ນໄດ້ເຫັນມາ.

And it came to pass that he returned to his own house at Jerusalem; and he cast himself upon his bed, being overcome with the Spirit and the things which he had seen.

ສ ແລະ ໂດຍໝົດກຳລັງດ້ວຍພຣະວິນຍານ, ເພິ່ນຈຶ່ງຖືກນຳໄປ ໃນ ພາບນິມິດ, ຈົນວ່າເພິ່ນເຫັນ ຟ້າສະຫວັນເປີດ, ແລະ ເພິ່ນ ຄິດວ່າເພິ່ນເຫັນພຣະເຈົ້າປະທັບຢູ່ທີ່ພຣະທີ່ນັ່ງ, ຫຸ້ມລ້ອມໄປ ດ້ວຍເຫລົ່າທູດທັງຫລາຍຈົນນັບບໍ່ຖ້ວນ ຢູ່ໃນທ່າທາງກຳລັງ ຮ້ອງເພງ ແລະ ສັນລະເສີນພຣະເຈົ້າຂອງພວກເຂົາຢູ່.

And being thus overcome with the Spirit, he was carried away in a vision, even that he saw the heavens open, and he thought he saw God sitting upon his throne, surrounded with numberless concourses of angels in the attitude of singing and praising their God.

ສ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນເຫັນຄົນຜູ້ໜຶ່ງລົງມາ ຈາກທ່າມກາງສະຫວັນ, ແລະ ເພິ່ນເຫັນວ່າ ລັດສະໝີພາບ ຂອງຄົນຜູ້ນັ້ນເໜືອກວ່າລັດສະໝີພາບຂອງດວງອາທິດໃນ ຕອນທ່ຽງວັນ.

And it came to pass that he saw One descending out of the midst of heaven, and he beheld that his luster was above that of the sun at noon-day.

ສ ແລະ ເພິ່ນເຫັນຄົນອີກ ສິບສອງຄົນຕິດຕາມຜູ້ນັ້ນລົງມານຳ ກັນ, ແລະ ຄວາມສະຫວ່າງຂອງພວກເຂົາ ເໜືອກວ່າແສງ ສະຫວ່າງຂອງດວງດາວໃນທ້ອງນະພາ.

And he also saw twelve others following him, and their brightness did exceed that of the stars in the firmament.

ສ ແລະ ຄົນເຫລົ່ານັ້ນລົງມາ ແລະ ອອກໄປໃນຜືນແຜ່ນດິນ ໂລກ; ແລະ ຜູ້ທຳອິດໄດ້ມາຢືນຢູ່ຕໍ່ໜ້າບິດາຂອງຂ້າພະເຈົ້າ, ແລະ ມອບ ໜັງສືໃຫ້ແກ່ເພິ່ນເຫລັ້ມໜຶ່ງ, ແລະ ຂໍໃຫ້ເພິ່ນອ່ານ.

And they came down and went forth upon the face of the earth; and the first came and stood before my father, and gave unto him a book, and bade him that he should read.

ສ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອເພິ່ນອ່ານໜັງສືແລ້ວ, ເພິ່ນກໍເຕັມໄປດ້ວຍ ພຣະວິນຍານຂອງພຣະຜູ້ເປັນເຈົ້າ.

And it came to pass that as he read, he was filled with the Spirit of the Lord.

ແລະ ເພີ່ນອ່ານ, ມີຄວາມว่า: ວິບັດ, ວິບັດແກ່ເຢຣູຊາເລັມ, ເພາະເຮົາເຫັນ ຄວາມໜ້າກຽດຊັງຂອງເຈົ້າ! ແທ້ຈິງແລ້ວ, ແລະ ຫລາຍຢ່າງທີ່ບິດາຂອງຂ້າພະເຈົ້າໄດ້ອ່ານມາຫລາຍເລື່ອງກ່ຽວກັບ ເຢຣູຊາເລັມ—ວ່າມັນຈະຖືກທຳລາຍພ້ອມກັບຜູ້ອາໄສຢູ່ໃນນັ້ນ; ຄົນຈຳນວນຫລວງຫລາຍກໍຈະຕາຍດ້ວຍດາບ, ແລະ ຈຳນວນໜຶ່ງກໍຈະຖືກ ເອົາໄປເປັນຊະເລີຍໃນບາບີໂລນ.

And he read, saying: Wo, wo, unto Jerusalem, for I have seen thine abominations! Yea, and many things did my father read concerning Jerusalem—that it should be destroyed, and the inhabitants thereof; many should perish by the sword, and many should be carried away captive into Babylon.

ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອບິດາຂອງຂ້າພະເຈົ້າໄດ້ອ່ານ ແລະ ໄດ້ເຫັນສິ່ງທີ່ຍິ່ງໃຫຍ່ ແລະ ໜ້າອັດສະຈັນຫລາຍຢ່າງແລ້ວ, ເພີ່ນກໍໄດ້ທູນຂໍຫລາຍຢ່າງຕໍ່ພຣະຜູ້ເປັນເຈົ້າ ເຊັ່ນ: ໂອ້ ອົງພຣະຜູ້ເປັນເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່ເອີຍ ວຽກງານຂອງພຣະອົງຊົງຍິ່ງໃຫຍ່ ແລະ ໜ້າອັດສະຈັນແທ້ໆ! ພຣະທີ່ນັ່ງຂອງພຣະອົງຢູ່ສູງໃນຟ້າສະຫວັນ, ອຳນາດ ແລະ ພຣະກະລຸນາທິຄຸນ ແລະ ຄວາມເມດຕາຂອງພຣະອົງມີຢູ່ເໜືອຜູ້ອາໄສທັງປວງຂອງແຜ່ນດິນໂລກ; ແລະ ເພາະພຣະອົງມີຄວາມເມດຕາ, ພຣະອົງຈະບໍ່ຍອມໃຫ້ຜູ້ທີ່ ມາຫາພຣະອົງຖືກທຳລາຍ!

And it came to pass that when my father had read and seen many great and marvelous things, he did exclaim many things unto the Lord; such as: Great and marvelous are thy works, O Lord God Almighty! Thy throne is high in the heavens, and thy power, and goodness, and mercy are over all the inhabitants of the earth; and, because thou art merciful, thou wilt not suffer those who come unto thee that they shall perish!

ແລະ ຕາມນີ້ຄືພາສາຂອງບິດາຂອງຂ້າພະເຈົ້າໃນການສັນລະເສີນພຣະເຈົ້າຂອງເພີ່ນ; ເພາະຈິດວິນຍານຂອງເພີ່ນປິຕິຍິນດີ, ແລະ ສຸດໃຈຂອງເພີ່ນອີ່ມເອີບເພາະສິ່ງທີ່ເພີ່ນໄດ້ເຫັນ, ແທ້ຈິງແລ້ວ, ສິ່ງທີ່ພຣະເຈົ້າໄດ້ສະແດງຕໍ່ເພີ່ນ.

And after this manner was the language of my father in the praising of his God; for his soul did rejoice, and his whole heart was filled, because of the things which he had seen, yea, which the Lord had shown unto him.

ແລະ ບັດນີ້ຂ້າພະເຈົ້າ, ນີໄຟ, ບໍ່ໄດ້ເຮັດເລື່ອງລາວຄົບຖ້ວນເຖິງເລື່ອງທີ່ບິດາຂອງຂ້າພະເຈົ້າໄດ້ບັນທຶກໄວ້, ເພາະເພີ່ນໄດ້ບັນທຶກໄວ້ຫລາຍເລື່ອງທີ່ເພີ່ນໄດ້ເຫັນໃນພາບນິມິດ ແລະ ໃນຄວາມຝັນ; ແລະ ເພີ່ນໄດ້ຂຽນໄວ້ຫລາຍເລື່ອງທີ່ເພີ່ນ ໄດ້ທຳນາຍ ແລະ ໄດ້ເວົ້າກັບລູກຫລານຂອງເພີ່ນນຳອີກ, ຊຶ່ງຂ້າພະເຈົ້າບໍ່ໄດ້ບັນທຶກເລື່ອງລາວໄວ້ຄົບຖ້ວນ.

And now I, Nephi, do not make a full account of the things which my father hath written, for he hath written many things which he saw in visions and in dreams; and he also hath written many things which he prophesied and spake unto his children, of which I shall not make a full account.

ແຕ່ຂ້າພະເຈົ້າຈະຂຽນເລື່ອງລາວກ່ຽວກັບການປະຕິບັດຂອງຂ້າພະເຈົ້າໃນວັນເວລາຂອງຂ້າພະເຈົ້າ. ຈົ່ງເບິ່ງ, ຂ້າພະເຈົ້າໄດ້ຫຍໍ້ຂໍ້ຄວາມຈາກ ບັນທຶກຂອງບິດາຂອງຂ້າພະເຈົ້າໄວ້ໃນແຜ່ນຈາລຶກ ຊຶ່ງເຮັດດ້ວຍມືຂອງຂ້າພະເຈົ້າເອງ. ດັ່ງນັ້ນ ຫລັງຈາກຂ້າພະເຈົ້າຫຍໍ້ບັນທຶກຂອງບິດາຂອງຂ້າພະເຈົ້າແລ້ວ, ຂ້າພະເຈົ້າຈຶ່ງຈະຂຽນເລື່ອງລາວກ່ຽວກັບຊີວິດຂອງຂ້າພະເຈົ້າເອງ.

But I shall make an account of my proceedings in my days. Behold, I make an abridgment of the record of my father, upon plates which I have made with mine own hands; wherefore, after I have abridged the record of my father then will I make an account of mine own life.

ສະນັ້ນ, ຂ້າພະເຈົ້າຈຶ່ງປາດຖະໜາຈະໃຫ້ທ່ານຮູ້ວ່າ ຫລັງຈາກພຣະຜູ້ເປັນເຈົ້າໄດ້ສະແດງສິ່ງທີ່ໜ້າອັດສະຈັນ ຫລາຍຢ່າງຕໍ່ລີໄຮ, ບິດາຂອງຂ້າພະເຈົ້າ, ແທ້ຈິງແລ້ວ, ກ່ຽວກັບ ຄວາມພິນາດຂອງເຢຣູຊາເລັມ, ຈົ່ງເບິ່ງ, ເພີ່ນໄດ້ອອກໄປໃນ ບັນດາຜູ້ຄົນ ແລະ ເລີ່ມຕົ້ນ ທຳນາຍ ແລະ ປະກາດກັບພວກເຂົາ ເຖິງເລື່ອງທີ່ເພີ່ນໄດ້ເຫັນ ແລະ ໄດ້ຍິນມາ.

Therefore, I would that ye should know, that after the Lord had shown so many marvelous things unto my father, Lehi, yea, concerning the destruction of Jerusalem, behold he went forth among the people, and began to prophesy and to declare unto them concerning the things which he had both seen and heard.

ຄ.ສ. ๑๙ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວຢິວໄດ້ ເຍາະເຍີ້ຍເພີ່ນ ເພາະເລື່ອງທີ່ເພີ່ນໃຫ້ຖ້ອຍຄຳກ່ຽວກັບພວກເຂົາ; ເພາະເພີ່ນ ໃຫ້ຖ້ອຍຄຳອັນແທ້ຈິງເຖິງຄວາມຊົ່ວຮ້າຍຂອງພວກເຂົາ ແລະ ຄວາມໜ້າກຽດຊັງຂອງພວກເຂົາ; ແລະ ເພີ່ນໃຫ້ຖ້ອຍຄຳວ່າ ເລື່ອງທີ່ເພີ່ນໄດ້ເຫັນ ແລະ ໄດ້ຍິນ, ແລະ ທັງເລື່ອງທີ່ເພີ່ນອ່ານ ຈາກໜັງສືເຫລັ້ມນັ້ນ ຊຶ່ງສະແດງໃຫ້ປະຈັກຢ່າງແຈ່ມແຈ້ງເຖິງ ການສະເດັດມາຂອງ ພຣະເມຊີອາອົງໜຶ່ງ, ແລະ ການໄຖ່ຂອງ ໂລກນຳອີກ.

And it came to pass that the Jews did mock him because of the things which he testified of them; for he truly testified of their wickedness and their abominations; and he testified that the things which he saw and heard, and also the things which he read in the book, manifested plainly of the coming of a Messiah, and also the redemption of the world.

ຄ.ສ. ๘๐ ແລະ ເມື່ອຊາວຢິວໄດ້ຍິນເຖິງເລື່ອງເຫລົ່ານີ້ ພວກເຂົາກໍຄຽດ ແຄ້ນໃຫ້ເພີ່ນ; ແທ້ຈິງແລ້ວ, ເໝືອນກັນກັບຄຽດແຄ້ນໃຫ້ສາດ ສະດາໃນສະໄໝກ່ອນ, ຜູ້ທີ່ພວກເຂົາໄດ້ ຂັບໄລ່, ແລະ ແກວ່ງ ກ້ອນຫີນໃສ່, ແລະ ເຂັ່ນຂ້າ, ແລະ ຄົນເຫລົ່ານັ້ນກໍພະຍາຍາມ ຊອກຫາຊີວິດຂອງເພີ່ນເໝືອນກັນ, ເພື່ອຈະເອົາມັນໄປເສຍ. ແຕ່ຈົ່ງເບິ່ງ, ຂ້າພະເຈົ້າມີໄຟຂໍສະແດງຕໍ່ທ່ານວ່າ ຄວາມເມດຕາ ອັນລະອຽດອ່ອນຂອງພຣະຜູ້ເປັນເຈົ້າມີຢູ່ເໜືອທຸກຄົນທີ່ ພຣະອົງເລືອກໄວ້, ເປັນເພາະສັດທາຂອງພວກເຂົາ, ມັນຈຶ່ງ ເຮັດໃຫ້ພວກເຂົາເຂັ້ມແຂງຈົນເຖິງອຳນາດການປົດປ່ອຍ.

And when the Jews heard these things they were angry with him; yea, even as with the prophets of old, whom they had cast out, and stoned, and slain; and they also sought his life, that they might take it away. But behold, I, Nephi, will show unto you that the tender mercies of the Lord are over all those whom he hath chosen, because of their faith, to make them mighty even unto the power of deliverance.

๑ ນີໄຟ ๘

๑ ເພາະຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນຄື ພຣະຜູ້ເປັນເຈົ້າໄດ້ ບັນຊາບິດາຂອງຂ້າພະເຈົ້າ, ແທ້ຈິງແລ້ວ, ແມ່ນຢູ່ໃນຄວາມຝັນ ແລະ ກ່າວກັບເພີ່ນວ່າ: ເຈົ້າເປັນສຸກແລ້ວລີໄຮເພາະສິ່ງທີ່ເຈົ້າ ກະທຳໄວ້, ແລະ ເພາະເຈົ້າຊື່ສັດ ແລະ ປະກາດກັບຜູ້ຄົນພວກນີ້ ເຖິງເລື່ອງທີ່ເຮົາສັ່ງເຈົ້າ, ຈົ່ງເບິ່ງ, ພວກເຂົາພະຍາຍາມຈະ ເອົາ ຊີວິດຂອງເຈົ້າ.

๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະຜູ້ເປັນເຈົ້າ ໄດ້ບັນຊາ ບິດາຂອງຂ້າພະເຈົ້າຢູ່ໃນ ຄວາມຝັນว່າ ເພີ່ນຄວນ ນຳຄອບຄົວ ຂອງເພີ່ນອອກໄປໃນຖິ່ນແຫ້ງແລ້ງກັນດານ.

๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພີ່ນເປັນຄົນ ເຊື່ອຟັງ ພຣະຄຳຂອງພຣະຜູ້ເປັນເຈົ້າ, ດັ່ງນັ້ນ ເພີ່ນຈຶ່ງເຮັດຕາມ ພຣະຄຳທີ່ພຣະອົງບັນຊາເພີ່ນ.

๔ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພີ່ນໄດ້ອອກໄປໃນຖິ່ນ ແຫ້ງແລ້ງກັນດານ. ແລະ ເພີ່ນໄດ້ປະຖິ້ມເຮືອນຊານ ແລະ ແຜ່ນດິນຊຶ່ງເປັນມູນມໍລະດົກຂອງເພີ່ນ, ແລະ ຄຳຂອງເພີ່ນ, ແລະ ເງິນຂອງເພີ່ນ, ແລະ ຂອງມີຄ່າຂອງເພີ່ນ, ແລະ ບໍ່ໄດ້ເອົາ ສິ່ງໃດໄປກັບເພີ່ນເລີຍ, ນອກຈາກຄອບຄົວ, ແລະ ສະບຽງ ອາຫານ, ແລະ ຜ້າເຕັນ, ແລະ ອອກໄປໃນຖິ່ນແຫ້ງແລ້ງ ກັນດານ.

๕ ແລະ ເພີ່ນລົງມາເຖິງຊາຍແດນໃກ້ຝັ່ງ ທະເລແດງ; ແລະ ເພີ່ນເດີນທາງໃນຖິ່ນແຫ້ງແລ້ງກັນດານໃນຊາຍແດນ ຊຶ່ງຢູ່ໃກ້ ທະເລແດງເຂົ້າໄປອີກ; ແລະ ເພີ່ນໄດ້ເດີນທາງໄປໃນຖິ່ນ ແຫ້ງແລ້ງກັນດານກັບຄອບຄົວຂອງເພີ່ນທີ່ມີຊາໄຮຢາ, ມານດາຂອງຂ້າພະເຈົ້າ, ແລະ ພວກອ້າຍຂອງຂ້າພະເຈົ້າຄື ເລ ມັນ, ເລມູເອນ, ແລະ ແຊມ.

๖ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອເພີ່ນເດີນທາງໃນຖິ່ນ ແຫ້ງແລ້ງກັນດານໄດ້ສາມມື້, ເພີ່ນໄດ້ຕັ້ງຜ້າເຕັນຂອງເພີ່ນຂຶ້ນ ໃນ ຮ່ອມພູທີ່ຢູ່ແຄມຝັ່ງຂອງແມ່ນ້ຳສາຍໜຶ່ງ.

๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພີ່ນໄດ້ສ້າງ ແທ່ນບູຊາດ້ວຍ ຫີນ, ແລະ ທຳການຖວາຍເຄື່ອງບູຊາ ແດ່ພຣະຜູ້ເປັນເຈົ້າ, ແລະ ຖວາຍຄວາມ ຂອບພຣະຄຸນແດ່ພຣະຜູ້ເປັນເຈົ້າອົງເປັນ ພຣະເຈົ້າຂອງພວກເຮົາ.

๘ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພີ່ນຕັ້ງຊື່ແມ່ນ້ຳນັ້ນວ່າ ເລ ມັນ, ແລະ ມັນໄຫລລົງສູ່ທະເລແດງ, ແລະ ຮ່ອມພູຢູ່ໃນ ຊາຍແດນໃກ້ປາກແມ່ນ້ຳສາຍນັ້ນ.

1 Nephi 2

For behold, it came to pass that the Lord spake unto my father, yea, even in a dream, and said unto him: Blessed art thou Lehi, because of the things which thou hast done; and because thou hast been faithful and declared unto this people the things which I commanded thee, behold, they seek to take away thy life.

And it came to pass that the Lord commanded my father, even in a dream, that he should take his family and depart into the wilderness.

And it came to pass that he was obedient unto the word of the Lord, wherefore he did as the Lord commanded him.

And it came to pass that he departed into the wilderness. And he left his house, and the land of his inheritance, and his gold, and his silver, and his precious things, and took nothing with him, save it were his family, and provisions, and tents, and departed into the wilderness.

And he came down by the borders near the shore of the Red Sea; and he traveled in the wilderness in the borders which are nearer the Red Sea; and he did travel in the wilderness with his family, which consisted of my mother, Sariah, and my elder brothers, who were Laman, Lemuel, and Sam.

And it came to pass that when he had traveled three days in the wilderness, he pitched his tent in a valley by the side of a river of water.

And it came to pass that he built an altar of stones, and made an offering unto the Lord, and gave thanks unto the Lord our God.

And it came to pass that he called the name of the river, Laman, and it emptied into the Red Sea; and the valley was in the borders near the mouth thereof.

ຈ ແລະ ເມື່ອບິດາຂອງຂ້າພະເຈົ້າເຫັນວ່າ ແມ່ນ້ຳໄຫລລົງໄປສູ່ອ່າງນ້ຳທະເລແດງ, ເພີ່ນຈຶ່ງເວົ້າກັບເລມັນມີຄວາມວ່າ: ໂອ້ ຂໍໃຫ້ລູກຈົ່ງເປັນຄືກັນກັບແມ່ນ້ຳສາຍນີ້ ຊຶ່ງໄຫລໄປຫາອ່າງນ້ຳແຫ່ງຄວາມຊອບທຳທັງປວງຕະຫລອດເວລາດ້ວຍເທີ້ນ!

ຈ ແລະ ເພີ່ນເວົ້າກັບເລມູເອນອີກວ່າ: ໂອ້ ຂໍໃຫ້ລູກຈົ່ງເປັນ ເໝືອນດັ່ງຮ່ອມພູນີ້, ຊຶ່ງໝັ້ນຄົງ ແລະ ແນ່ວແນ່, ແລະ ບໍ່ຫວັ່ນໄຫວ ໃນການຮັກສາພຣະບັນຍັດຂອງພຣະຜູ້ເປັນເຈົ້າ!

ຈ ບັດນີ້ເພີ່ນເວົ້າເຊັ່ນນີ້ ເພາະຄວາມແຂງຄໍຂອງເລມັນກັບ ເລມູເອນ; ເພາະຈົ່ງເບິ່ງ ພວກເຂົາໄດ້ ຈົ່ມໃຫ້ ບິດາຂອງພວກ ເຂົາຫລາຍສິ່ງຫລາຍຢ່າງ, ເພາະເພີ່ນເປັນຄົນເຫັນ ພາບນິມິດ, ແລະ ພາພວກເຂົາອອກຈາກເຢຣູຊາເລັມ, ແຜ່ນດິນຊຶ່ງເປັນມູນ ມໍລະດົກຂອງພວກເຂົາ, ແລະ ຈາກຄຳຂອງພວກເຂົາ, ແລະ ເງິນຂອງພວກເຂົາ, ແລະ ຂອງມີຄ່າຂອງພວກເຂົາ ໃຫ້ມາຕາຍ ຢູ່ໃນຖິ່ນແຫ້ງແລ້ງກັນດານ. ແລະ ການນີ້ຄົນທັງສອງກ່າວວ່າ ເພີ່ນກະທຳ ໄປດ້ວຍຄວາມຄິດ ຝັນ ອັນ ໂງ່ຈ້າ ທີ່ເກີດ ຂຶ້ນ ໃນ ໃຈ ຂອງ ເພີ່ນ ເອງ.

ຈ ແລະ ເຖິງ ແມ່ນ ວ່າ ເລ ມັ ນ ກັ ບ ເ ລ ມ ູ ເ ອ ນ ເ ປ ັ ນ ອ້ າ ຍ ໃ ຫ ຍ່ ກ ໍ ຕ າ ມ, ແ ຕ່ ພ ວ ກ ເ ຂ ົ າ ໄ ດ້ ຈ ົ ່ ມ ໃ ຫ້ ບ ິ ດ າ ຂ ອ ງ ຕ ົ ນ. ແ ລ ະ ພ ວ ກ ເ ຂ ົ າ ໄ ດ້ ຈ ົ ່ ມ ເ ພ າ ະ ບ ໍ ່ ຮ ູ້ ກ ານ ກ ະ ທ ຳ ຂ ອ ງ ພ ຣ ະ ເ ຈ ົ້ າ ອ ົ ງ ນ ັ ້ ນ ຜ ູ້ ສ ້ າ ງ ພ ວ ກ ເ ຂ ົ າ.

ຈ ພ ວ ກ ເ ຂ ົ າ ທ ັ ງ ບ ໍ ່ ເ ຊ ື ່ ອ ວ່ າ ເ ຢ ຣ ູ ຊ າ ເ ລ ັ ມ, ມ ະ ຫ ານ ະ ຄ ອ ນ ທ ີ ່ ຍ ິ ່ ງ ໃ ຫ ຍ່, ຈ ະ ຖ ືກ ທ ຳ ລ າ ຍ ໄ ດ້ ຕ າ ມ ຄ ຳ ເ ວ ົ້ າ ຂ ອ ງ ສ າ ດ ສ ະ ດ າ. ແ ລ ະ ພ ວ ກ ເ ຂ ົ າ ເ ປ ັ ນ ເ ໝ ືອ ນ ດ ັ ່ ງ ຊ າ ວ ຢ ິ ວ ຜ ູ້ ຢ ູ່ ໃ ນ ເ ຢ ຣ ູ ຊ າ ເ ລ ັ ມ, ທ ີ່ ພ ະ ຍ າ ຍ າ ມ ຈ ະ ເ ອ ົ າ ຊ ີ ວ ິ ດ ຂ ອ ງ ບ ິ ດ າ ຂ ອ ງ ຂ້ າ ພ ະ ເ ຈ ົ້ າ ໄ ປ.

ຈ ແ ລ ະ ເ ຫ ດ ການ ໄ ດ້ ບ ັ ງ ເ ກ ີ ດ ຂ ຶ້ ນ ຄ ື ບ ິ ດ າ ຂ ອ ງ ຂ້ າ ພ ະ ເ ຈ ົ້ າ ໄ ດ້ ເ ວ ົ້ າ ກ ັ ບ ພ ວ ກ ເ ຂ ົ າ ໃ ນ ຮ ່ ອ ມ ພ ູ ເ ລ ມ ູ ເ ອ ນ, ດ ້ ວ ຍ ພ ະ ລ ັ ງ, ໂ ດ ຍ ທ ີ ່ ເ ພ ີ ່ ນ ເ ຕ ັ ມ ໄ ປ ດ ້ ວ ຍ ພ ຣ ະ ວ ິ ນ ຍ ານ, ຈ ົ ນ ຮ ່ າ ງ ກ າ ຍ ຂ ອ ງ ພ ວ ກ ເ ຂ ົ າ ສ ັ ່ ນ ຢ ູ່ ຕ ໍ ່ ໜ ້ າ ເ ພ ີ ່ ນ. ແ ລ ະ ເ ພ ີ ່ ນ ໄ ດ້ ເ ຮ ັ ດ ໃ ຫ້ ພ ວ ກ ເ ຂ ົ າ ອ ັ ບ ອ າ ຍ ຈ ົ ນ ພ ວ ກ ເ ຂ 	b ບ ໍ ່ ກ້ າ ຕ ໍ ່ ວ ່ າ ເ ພ ີ ່ ນ; ດ ັ ່ ງ ນ ັ ້ ນ, ພ ວ ກ ເ ຂ ົ າ ຈ ຶ ່ ງ ເ ຮ ັ ດ ຕ າ ມ ທ ີ ່ ເ ພ ີ ່ ນ ບ ັ ນ ຊ າ.

ຈ ແ ລ ະ ບ ິ ດ າ ຂ ອ ງ ຂ້ າ ພ ະ ເ ຈ ົ້ າ ອ າ ໄ ສ ຢ ູ່ ໃ ນ ຜ ້ າ ເ ຕ ັ ນ.

ຈ ແ ລ ະ ເ ຫ ດ ການ ໄ ດ້ ບ ັ ງ ເ ກ ີ ດ ຂ ຶ້ ນ ຄ ື ຂ້ າ ພ ະ ເ ຈ ົ້ າ ນ ີ ໄ ຟ ໂ ດ ຍ ທ ີ ່ ມ ີ ອ າ ຍ ຸ ໜ ້ ອ ຍ ຢ ູ່, ແ ຕ່ ວ ່ າ ມ ີ ຮ ່ າ ງ ກ າ ຍ ສ ູ ງ ໃ ຫ ຍ່ ແ ລ ະ ມ ີ ຄ ວ າ ມ ປ າ ດ ຖ ະ ໜ າ ອ ັ ນ ແ ຮ ງ ກ້ າ ຢ າ ກ ຮ ູ້ ຈ ັ ກ ຄ ວ າ ມ ລ ຶ ກ ລ ັ ບ ຂ ອ ງ ພ ຣ ະ ເ ຈ ົ້ າ, ດ ັ ່ ງ ນ ັ ້ ນ ຂ້ າ ພ ະ ເ ຈ ົ້ າ ຈ ຶ ່ ງ ໄ ດ້ ຮ ້ ອ ງ ທ ູ ນ ຕ ໍ ່ ພ ຣ ະ ຜ ູ້ ເ ປ ັ ນ ເ ຈ ົ້ າ; ແ ລ ະ ຈ ົ່ ງ ເ ບ ິ່ ງ ພ ຣ ະ ອ ົ ງ ໄ ດ້ ສ ະ ເ ດ ັ ດ ມ າ ຫ າ ຂ້ າ ພ ະ ເ ຈ ົ້ າ, ແ ລ ະ ເ ຮ ັ ດ ໃ ຫ້ ໃ ຈ ຂ ອ ງ ຂ້ າ ພ ະ ເ ຈ ົ້ າ ອ ່ ອ ນ ລ ົ ງ ຈ ົ ນ ວ ່ າ ຂ້ າ ພ ະ ເ ຈ ົ້ າ ເ ຊ ື ່ ອ ຄ ຳ ເ ວ ົ້ າ ທ ີ ່ ບ ິ ດ າ ຂ ອ ງ ຂ້ າ ພ ະ ເ ຈ ົ້ າ ເ ວ ົ້ າ ມ າ ທ ັ ງ ໝ ົ ດ; ດ ັ ່ ງ ນ ັ ້ ນ, ຂ້ າ ພ ະ ເ ຈ ົ້ າ ຈ ຶ ່ ງ ບ ໍ ່ ໄ ດ້ ກ ະ ບ ົ ດ ຕ ໍ ່ ເ ພ ີ ່ ນ ເ ໝ ືອ ນ ດ ັ ່ ງ ພ ວ ກ ອ້ າ ຍ ຂ ອ ງ ຂ້ າ ພ ະ ເ ຈ ົ້ າ.

And when my father saw that the waters of the river emptied into the fountain of the Red Sea, he spake unto Laman, saying: O that thou mightest be like unto this river, continually running into the fountain of all righteousness!

And he also spake unto Lemuel: O that thou mightest be like unto this valley, firm and steadfast, and immovable in keeping the commandments of the Lord!

Now this he spake because of the stiffneckedness of Laman and Lemuel; for behold they did murmur in many things against their father, because he was a visionary man, and had led them out of the land of Jerusalem, to leave the land of their inheritance, and their gold, and their silver, and their precious things, to perish in the wilderness. And this they said he had done because of the foolish imaginations of his heart.

And thus Laman and Lemuel, being the eldest, did murmur against their father. And they did murmur because they knew not the dealings of that God who had created them.

Neither did they believe that Jerusalem, that great city, could be destroyed according to the words of the prophets. And they were like unto the Jews who were at Jerusalem, who sought to take away the life of my father.

And it came to pass that my father did speak unto them in the valley of Lemuel, with power, being filled with the Spirit, until their frames did shake before him. And he did confound them, that they durst not utter against him; wherefore, they did as he commanded them.

And my father dwelt in a tent.

And it came to pass that I, Nephi, being exceedingly young, nevertheless being large in stature, and also having great desires to know of the mysteries of God, wherefore, I did cry unto the Lord; and behold he did visit me, and did soften my heart that I did believe all the words which had been spoken by my father; wherefore, I did not rebel against him like unto my brothers.

ແລະ ຂ້າພະເຈົ້າໄດ້ເວົ້າກັບແຊມເພື່ອເຮັດໃຫ້ລາວຮູ້ຈັກເລື່ອງ ທີ່ພຣະຜູ້ເປັນເຈົ້າໄດ້ສະແດງໃຫ້ປະຈັກແກ່ຂ້າພະເຈົ້າດ້ວຍ ພຣະວິນຍານສັກສິດຂອງພຣະອົງ. ແລະ ເຫດການໄດ້ບັງເກີດ ຂຶ້ນຄື ລາວເຊື່ອໃນຄຳເວົ້າຂອງຂ້າພະເຈົ້າ.

ແຕ່ຈົ່ງເບິ່ງ ເລມັນກັບເລມູເອນບໍ່ເຊື່ອຟັງຄຳເວົ້າຂອງ ຂ້າພະເຈົ້າ; ແລະ ດ້ວຍ ຄວາມໂສກເສົ້າເພາະຄວາມແຂງ ກະດ້າງຂອງໃຈຂອງພວກເຂົາ, ຂ້າພະເຈົ້າຈຶ່ງໄດ້ຮ້ອງທູນຕໍ່ ພຣະຜູ້ເປັນເຈົ້າເພື່ອພວກເຂົາ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະຜູ້ເປັນເຈົ້າຮັບສັ່ງກັບ ຂ້າພະເຈົ້າ, ມີຄວາມວ່າ: ເຈົ້າເປັນສຸກແລ້ວນີໄຟເພາະ ສັດທາ ຂອງເຈົ້າ, ເພາະເຈົ້າສະແຫວງຫາເຮົາຢ່າງພາກພຽນ, ດ້ວຍ ຄວາມຕ່ຳຕ້ອຍໃນໃຈ.

ແລະ ຕາບໃດທີ່ເຈົ້າຈະຮັກສາບັນຍັດຂອງເຮົາ, ເຈົ້າຈະ ຮຸ່ງ ເຮືອງ, ແລະ ຈະຖືກພາໄປຫາ ແຜ່ນດິນແຫ່ງຄຳສັນຍາ; ແທ້ຈິງ ແລ້ວ, ແມ່ນແຜ່ນດິນທີ່ເຮົາຕຽມໄວ້ໃຫ້ເຈົ້າ; ແທ້ຈິງແລ້ວ, ແມ່ນ ແຜ່ນດິນທີ່ປະເສີດເລີດລ້ຳກວ່າແຜ່ນດິນອື່ນໃດທັງສິ້ນ.

ແລະ ຕາບໃດທີ່ພວກອ້າຍຂອງເຈົ້າຍັງກະບົດຕໍ່ເຈົ້າ, ພວກ ເຂົາຈະຖືກ ຕັດອອກຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ.

ແລະ ຕາບໃດທີ່ເຈົ້າຍັງຮັກສາບັນຍັດຂອງເຮົາ, ເຈົ້າຈະຖືກ ກະທຳໃຫ້ເປັນ ຜູ້ປົກຄອງ ແລະ ຜູ້ສອນພວກອ້າຍຂອງເຈົ້າ.

ເພາະຈົ່ງເບິ່ງ, ໃນມື້ນັ້ນທີ່ພວກເຂົາກະບົດຕໍ່ເຮົາ, ເຮົາຈະ ສາບແຊ່ງພວກເຂົາ ເຖິງຂະໜາດວ່າເປັນການສາບແຊ່ງຢ່າງ ສາຫັດ, ແລະ ພວກເຂົາຈະບໍ່ມີອຳນາດເໜືອກວ່າລູກຫລານ ຂອງເຈົ້າເວັ້ນເສຍແຕ່ພວກເຂົາຈະກະບົດຕໍ່ເຮົາເໝືອນກັນ.

ແລະ ຖ້າຫາກເປັນໄປວ່າ ພວກເຂົາກະບົດຕໍ່ເຮົາ, ພວກເຂົາກໍ ຈະເປັນ ໄພພິບັດແກ່ລູກຫລານຂອງເຈົ້າ, ນີ້ເພື່ອຊ່ວຍ ຕັກເຕືອນພວກເຂົາທາງຄວາມຊົງຈຳ.

And I spake unto Sam, making known unto him the things which the Lord had manifested unto me by his Holy Spirit. And it came to pass that he believed in my words.

But, behold, Laman and Lemuel would not hearken unto my words; and being grieved because of the hardness of their hearts I cried unto the Lord for them.

And it came to pass that the Lord spake unto me, saying: Blessed art thou, Nephi, because of thy faith, for thou hast sought me diligently, with lowliness of heart.

And inasmuch as ye shall keep my commandments, ye shall prosper, and shall be led to a land of promise; yea, even a land which I have prepared for you; yea, a land which is choice above all other lands.

And inasmuch as thy brethren shall rebel against thee, they shall be cut off from the presence of the Lord.

And inasmuch as thou shalt keep my commandments, thou shalt be made a ruler and a teacher over thy brethren.

For behold, in that day that they shall rebel against me, I will curse them even with a sore curse, and they shall have no power over thy seed except they shall rebel against me also.

And if it so be that they rebel against me, they shall be a scourge unto thy seed, to stir them up in the ways of remembrance.

๑ ນີໄຟ ມ

๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້ານີໄຟຫລັງຈາກໄດ້ເວົ້າກັບພຣະຜູ້ເປັນເຈົ້າແລ້ວ, ກໍກັບມາຫາຜ້າເຕັນຂອງບິດາຂອງຂ້າພະເຈົ້າ.

๘ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນໄດ້ເວົ້າກັບຂ້າພະເຈົ້າ, ມີຄວາມວ່າ: ຈົ່ງເບິ່ງພໍ່ຝັນເຫັນເລື່ອງໜຶ່ງໃນ ຄວາມຝັນ, ຊຶ່ງໃນ ຄວາມຝັນນັ້ນພຣະຜູ້ເປັນເຈົ້າໄດ້ບັນຊາພໍ່ວ່າ ລູກກັບພວກອ້າຍ ຂອງລູກຕ້ອງກັບຄືນໄປເຢຣູຊາເລັມ.

ມ ເພາະຈົ່ງເບິ່ງ, ລາບານມີບັນທຶກຂອງຊາວຢິວ ແລະ ລຳດັບ ການສືບເຊື້ອສາຍຂອງບັນພະບຸລຸດຂອງພໍ່ຄືກັນ, ແລະ ມັນໄດ້ ຈາລຶກຢູ່ໃນແຜ່ນຈາລຶກທອງເຫລືອງ.

๔ ດັ່ງນັ້ນ, ພຣະເຈົ້າໄດ້ບັນຊາພໍ່ວ່າ ລູກກັບພວກອ້າຍຂອງລູກ ຈະຕ້ອງກັບໄປບ້ານຂອງລາບານ, ເພື່ອຊອກຫາບັນທຶກ, ແລະ ນຳເອົາມັນມາໃນຖິ່ນແຫ້ງແລ້ງກັນດານບ່ອນນີ້.

๕ ແລະ ບັດນີ້, ຈົ່ງເບິ່ງພວກອ້າຍຂອງລູກຈົ່ມ, ໂດຍກ່າວວ່າ ເລື່ອງທີ່ພໍ່ຂໍຮ້ອງໃຫ້ພວກເຂົາເຮັດນັ້ນ ເປັນເລື່ອງຍາກ; ແຕ່ຈົ່ງ ເບິ່ງ, ພໍ່ບໍ່ໄດ້ຂໍຮ້ອງໃຫ້ພວກເຂົາເຮັດ, ແຕ່ມັນເປັນພຣະບັນຍັດ ຂອງພຣະຜູ້ເປັນເຈົ້າ.

ຜ ສະນັ້ນ ຈົ່ງໄປເຖີດ, ລູກຂອງພໍ່, ແລະ ລູກຈະເປັນທີ່ໂປດປານ ຂອງພຣະຜູ້ເປັນເຈົ້າ, ເພາະລູກ ບໍ່ໄດ້ຈົ່ມ.

໗ ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້ານີໄຟໄດ້ເວົ້າກັບ ບິດາຂອງຂ້າພະເຈົ້າວ່າ: ເຮົາ ຈະໄປ ແລະ ເຮັດສິ່ງທີ່ພຣະຜູ້ເປັນ ເຈົ້າບັນຊາ ເພາະເຮົາຮູ້ວ່າພຣະຜູ້ເປັນເຈົ້າຈະບໍ່ໃຫ້ ພຣະບັນຍັດ ກັບລູກຫລານມະນຸດ ນອກຈາກພຣະອົງຈະ ຕຽມທາງໄວ້ໃຫ້ ເຂົາ ເພື່ອເຂົາຈະໄດ້ສຳເລັດໃນສິ່ງທີ່ພຣະອົງບັນຊາເຂົາ.

๘ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອບິດາຂອງຂ້າພະເຈົ້າໄດ້ ຍິນຄຳເວົ້າເຫລົ່ານີ້ ເພິ່ນກໍດີໃຈຢ່າງຍິ່ງ, ເພາະເພິ່ນຮູ້ວ່າ ຂ້າພະເຈົ້າໄດ້ຮັບພອນຈາກພຣະຜູ້ເປັນເຈົ້າແລ້ວ.

ນ ແລະ ຂ້າພະເຈົ້ານີໄຟກັບພວກອ້າຍຂອງຂ້າພະເຈົ້າໄດ້ອອກ ເດີນທາງໄປໃນຖິ່ນແຫ້ງແລ້ງກັນດານ, ພ້ອມດ້ວຍຜ້າເຕັນ, ເພື່ອຂຶ້ນໄປແຜ່ນດິນເຢຣູຊາເລັມ.

๑๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພວກເຮົາຂຶ້ນມາເຖິງ ແຜ່ນດິນເຢຣູຊາເລັມແລ້ວ, ຂ້າພະເຈົ້າກັບພວກອ້າຍໄດ້ປຶກສາ ກັນ.

๑๑ ແລະ ພວກເຮົາ ຈົກສະຫລາກກັນ—ວ່າຜູ້ໃດໃນຈຳນວນ ພວກເຮົາຈະໄດ້ເຂົ້າໄປໃນບ້ານຂອງລາບານ. ແລະ ເຫດການໄດ້ ບັງເກີດຂຶ້ນຄື ສະຫລາກຕົກຢູ່ທີ່ເລມັນ; ແລະ ເລມັນຈຶ່ງໄດ້ເຂົ້າ ໄປໃນບ້ານລາບານ, ແລະ ເວົ້າກັບລາວລະຫວ່າງທີ່ນັ່ງຢູ່ໃນ ບ້ານຂອງລາວ.

1 Nephi 3

And it came to pass that I, Nephi, returned from speaking with the Lord, to the tent of my father.

And it came to pass that he spake unto me, saying: Behold I have dreamed a dream, in the which the Lord hath commanded me that thou and thy brethren shall return to Jerusalem.

For behold, Laban hath the record of the Jews and also a genealogy of my forefathers, and they are engraven upon plates of brass.

Wherefore, the Lord hath commanded me that thou and thy brothers should go unto the house of Laban, and seek the records, and bring them down hither into the wilderness.

And now, behold thy brothers murmur, saying it is a hard thing which I have required of them; but behold I have not required it of them, but it is a commandment of the Lord.

Therefore go, my son, and thou shalt be favored of the Lord, because thou hast not murmured.

And it came to pass that I, Nephi, said unto my father: I will go and do the things which the Lord hath commanded, for I know that the Lord giveth no commandments unto the children of men, save he shall prepare a way for them that they may accomplish the thing which he commandeth them.

And it came to pass that when my father had heard these words he was exceedingly glad, for he knew that I had been blessed of the Lord.

And I, Nephi, and my brethren took our journey in the wilderness, with our tents, to go up to the land of Jerusalem.

And it came to pass that when we had gone up to the land of Jerusalem, I and my brethren did consult one with another.

And we cast lots—who of us should go in unto the house of Laban. And it came to pass that the lot fell upon Laman; and Laman went in unto the house of Laban, and he talked with him as he sat in his house.

ຄ. ແລະ ລາວໄດ້ຂໍບັນທຶກຊຶ່ງຈາລຶກໄວ້ຢູ່ໃນແຜ່ນຈາລຶກ ທອງເຫລືອງ, ຊຶ່ງມີ ລຳດັບການສືບເຊື້ອສາຍຂອງບິດາຂອງ ຂ້າພະເຈົ້າຈາກລາບານ.

And he desired of Laban the records which were engraven upon the plates of brass, which contained the genealogy of my father.

ງ. ແລະ ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນຄື ລາບານໃຈຮ້າຍ, ແລະ ຈັບລາວໂຍນອອກໄປຈາກບ່ອນຢູ່ຂອງຕົນ; ແລະ ບໍ່ຍອມ ມອບບັນທຶກໃຫ້ແກ່ລາວ. ດັ່ງນັ້ນ, ລາວຈຶ່ງກ່າວກັບລາວວ່າ: ຈົ່ງ ເບິ່ງ, ເຈົ້າເປັນຂະໂມຍ ແລະ ເຮົາຈະຂ້າເຈົ້າ.

And behold, it came to pass that Laban was angry, and thrust him out from his presence; and he would not that he should have the records. Wherefore, he said unto him: Behold thou art a robber, and I will slay thee.

ຈ. ແຕ່ເລມັນໜີໄປຈາກທີ່ຢູ່ຂອງລາວ, ແລະ ເລົ່າເລື່ອງທີ່ ລາບານກະທຳໄປນັ້ນກັບພວກເຮົາ. ແລະ ພວກເຮົາເລີ່ມເສົ້າ ສະຫລົດໃຈຢ່າງຍິ່ງ, ແລະ ພວກອ້າຍຂອງຂ້າພະເຈົ້າເກືອບຈະ ກັບໄປຫາບິດາຂອງຂ້າພະເຈົ້າໃນຖິ່ນແຫ້ງແລ້ງກັນດານ.

But Laman fled out of his presence, and told the things which Laban had done, unto us. And we began to be exceedingly sorrowful, and my brethren were about to return unto my father in the wilderness.

ສ. ແຕ່ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກເຂົາວ່າ: ຕາບໃດທີ່ ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ ແລະ ຕາບໃດທີ່ພວກເຮົາຍັງມີ ຊີວິດຢູ່, ພວກເຮົາຈະບໍ່ລົງໄປຫາບິດາຂອງພວກເຮົາໃນຖິ່ນ ແຫ້ງແລ້ງກັນດານ ຈົນກວ່າຈະສຳເລັດໃນສິ່ງທີ່ພຣະຜູ້ເປັນເຈົ້າ ບັນຊາພວກເຮົາ.

But behold I said unto them that: As the Lord liveth, and as we live, we will not go down unto our father in the wilderness until we have accomplished the thing which the Lord hath commanded us.

ຊ. ດັ່ງນັ້ນ, ໃຫ້ພວກເຮົາຊື່ສັດໃນການຮັກສາພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ; ສະນັ້ນໃຫ້ພວກເຮົາລົງໄປຫາແຜ່ນດິນ ຊຶ່ງ ເປັນ ມູນມໍລະດົກຂອງບິດາຂອງພວກເຮົາ, ເພາະຈົ່ງເບິ່ງ ເພີ່ນ ໄດ້ປະຖິ້ມຄຳ ແລະ ເງິນ, ແລະ ຂອງມີຄ່ານາໆປະການໄວ້. ແລະ ທັງໝົດນີ້ເພີ່ນກະທຳໄປເພາະ ພຣະບັນຍັດຂອງພຣະຜູ້ເປັນ ເຈົ້າ.

Wherefore, let us be faithful in keeping the commandments of the Lord; therefore let us go down to the land of our father's inheritance, for behold he left gold and silver, and all manner of riches. And all this he hath done because of the commandments of the Lord.

ຊສ. ເພາະເພີ່ນຮູ້ວ່າ ເຢຣູຊາເລັມຈະຕ້ອງ ຖືກທຳລາຍເພາະ ຄວາມຊົ່ວຮ້າຍຂອງຜູ້ຄົນ.

For he knew that Jerusalem must be destroyed, because of the wickedness of the people.

ຊສ. ເພາະຈົ່ງເບິ່ງ ຄົນເຫລົ່ານັ້ນ ບໍ່ຍອມຮັບຖ້ອຍຄຳຂອງສາດ ສະດາ. ດັ່ງນັ້ນ, ຖ້າຫາກບິດາຂອງຂ້າພະເຈົ້າຍັງຢູ່ໃນແຜ່ນດິນ ນັ້ນຫລັງຈາກເພີ່ນໄດ້ຮັບ ບັນຊາໃຫ້ໜີຈາກແຜ່ນດິນແລ້ວ, ຈົ່ງ ເບິ່ງ, ເພີ່ນຈະຕ້ອງຕາຍຄືກັນ. ດັ່ງນັ້ນ, ມັນຈຶ່ງຈຳເປັນທີ່ເພີ່ນຈະ ຕ້ອງໜີຈາກແຜ່ນດິນນັ້ນ.

For behold, they have rejected the words of the prophets. Wherefore, if my father should dwell in the land after he hath been commanded to flee out of the land, behold, he would also perish. Wherefore, it must needs be that he flee out of the land.

ຊດ. ແລະ ຈົ່ງເບິ່ງ, ມັນເປັນຄວາມສະຫລຽວສະຫລາດຂອງ ພຣະເຈົ້າວ່າ ພວກເຮົາຈະໄດ້ ບັນທຶກເຫລົ່ານີ້, ເພື່ອຈະໄດ້ຮັກສາ ພາສາຂອງບັນພະບຸລຸດຂອງພວກເຮົາໄວ້ໃຫ້ແກ່ລູກຫລານ ຂອງພວກເຮົາ;

And behold, it is wisdom in God that we should obtain these records, that we may preserve unto our children the language of our fathers;

ຊສ. ແລະ ເພື່ອພວກເຮົາຈະ ຮັກສາຖ້ອຍຄຳຊຶ່ງເວົ້າດ້ວຍປາກ ຂອງສາດສະດາຜູ້ບໍລິສຸດທັງຫລາຍໄວ້ໃຫ້ພວກເຂົາເໝືອນ ກັນ, ຊຶ່ງພຣະວິນຍານ ແລະ ອຳນາດຂອງພຣະເຈົ້າໄດ້ມອບໄວ້ ກັບພວກເພີ່ນນັບແຕ່ການເລີ່ມຕົ້ນຂອງໂລກລົງມາຈົນເຖິງ ປະຈຸບັນນີ້.

And also that we may preserve unto them the words which have been spoken by the mouth of all the holy prophets, which have been delivered unto them by the Spirit and power of God, since the world began, even down unto this present time.

໒໑ ແລະ ເຫດການໄດ້ບັງເກີດຂຶ້ນຄື ຕາມພາສາຢ່າງນີ້
ຂ້າພະເຈົ້າໄດ້ຊັກຊວນພວກອ້າຍຂອງຂ້າພະເຈົ້າ ເພື່ອພວກເຂົາ
ຈະໄດ້ຊື່ສັດໃນການຮັກສາພຣະບັນຍັດຂອງພຣະເຈົ້າ.

And it came to pass that after this manner of language did I persuade my brethren, that they might be faithful in keeping the commandments of God.

໒໒ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ລົງໄປຫາ
ແຜ່ນດິນ ຊຶ່ງເປັນມູນມໍລະດົກຂອງພວກເຮົາ, ແລະ ພວກເຮົາ
ໄດ້ເຕົ້າໂຮມ ຄຳຂອງພວກເຮົາ, ແລະ ເງິນຂອງພວກເຮົາ, ແລະ
ຂອງມີຄ່າຂອງພວກເຮົາເຂົ້າກັນ.

And it came to pass that we went down to the land of our inheritance, and we did gather together our gold, and our silver, and our precious things.

໒໓ ແລະ ຫລັງຈາກພວກເຮົາເຕົ້າໂຮມຂອງເຫລົ່ານີ້ເຂົ້າກັນ
ແລ້ວ, ພວກເຮົາຈຶ່ງກັບຂຶ້ນໄປຫາບ້ານຂອງລາບານອີກ.

And after we had gathered these things together, we went up again unto the house of Laban.

໒໔ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາເຂົ້າໄປຫາ
ລາບານ, ແລະ ຂໍໃຫ້ລາວມອບບັນທຶກ ຊຶ່ງຈາລຶກໄວ້ຢູ່ໃນ ແຜ່ນ
ຈາລຶກທອງເຫລືອງໃຫ້ແກ່ພວກເຮົາ, ແລະ ພວກເຮົາຈະມອບ
ຄຳຂອງພວກເຮົາ, ແລະ ເງິນຂອງພວກເຮົາ, ແລະ ຂອງມີຄ່າ
ທັງໝົດຂອງພວກເຮົາໃຫ້ແກ່ລາວ.

And it came to pass that we went in unto Laban, and desired him that he would give unto us the records which were engraven upon the plates of brass, for which we would give unto him our gold, and our silver, and all our precious things.

໒໕ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອລາບານເຫັນຊັບສົມບັດ
ຂອງພວກເຮົາ, ແລະ ເຫັນວ່າມັນມີຈຳນວນຫລວງຫລາຍ ຈຶ່ງມີ
ຄວາມໂລບມາກຢາກໄດ້ມັນ, ເຖິງຂະໜາດທີ່ລາວໄດ້ຈັບພວກ
ເຮົາໂຍນອອກໄປ, ແລ້ວສັ່ງໃຫ້ຄົນໃຊ້ຂອງລາວໃຫ້ມາຂ້າພວກ
ເຮົາ, ເພື່ອລາວຈະໄດ້ຊັບສົມບັດຂອງພວກເຮົາ.

And it came to pass that when Laban saw our property, and that it was exceedingly great, he did lust after it, insomuch that he thrust us out, and sent his servants to slay us, that he might obtain our property.

໒໖ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ໜີໄປຕໍ່ໜ້າຄົນ
ໃຊ້ຂອງລາບານ, ແລະ ພວກເຮົາຈຳເປັນຕ້ອງປະຖິ້ມຊັບສົມບັດ
ຂອງພວກເຮົາໄວ້ທາງຫລັງ, ແລະ ມັນຈຶ່ງຕົກຢູ່ໃນກຳມືຂອງ
ລາບານ.

And it came to pass that we did flee before the servants of Laban, and we were obliged to leave behind our property, and it fell into the hands of Laban.

໒໗ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ໜີເຂົ້າໄປໃນ
ຖິ່ນແຫ້ງແລ້ງກັນດານ, ແລະ ຄົນໃຊ້ຂອງລາບານຕິດຕາມພວກ
ເຮົາບໍ່ທັນ, ແລະ ພວກເຮົາໄດ້ລີ້ຊ່ອນຕົວຢູ່ໃນຫວ່າງຫີນ.

And it came to pass that we fled into the wilderness, and the servants of Laban did not overtake us, and we hid ourselves in the cavity of a rock.

໒໘ ແລະ ເຫດການໄດ້ບັງເກີດຂຶ້ນຄື ເລມັນໄດ້ໃຈຮ້າຍໃຫ້
ຂ້າພະເຈົ້າ, ແລະ ໃຈຮ້າຍໃຫ້ບິດາຂອງຂ້າພະເຈົ້ານຳອີກ; ແລະ
ເລມູເອນກໍໃຈຮ້າຍເໝືອນກັນເພາະລາວເຊື່ອຟັງຄຳເວົ້າຂອງເລ
ມັນ. ດັ່ງນັ້ນ ເລມັນກັບເລມູເອນໄດ້ເວົ້າ ຄຳຮຸນແຮງຕໍ່ພວກເຮົາ,
ຜູ້ເປັນນ້ອງຂອງພວກເຂົາ, ແລະ ພວກເຂົາໄດ້ຕີພວກເຮົາດ້ວຍ
ໄມ້.

And it came to pass that Laman was angry with me, and also with my father; and also was Lemuel, for he hearkened unto the words of Laman. Wherefore Laman and Lemuel did speak many hard words unto us, their younger brothers, and they did smite us even with a rod.

໒໙ ແລະ ເຫດການໄດ້ບັງເກີດຂຶ້ນຄື ຂະນະທີ່ພວກເຂົາກຳລັງຕີ
ພວກເຮົາດ້ວຍໄມ້ຢູ່ນັ້ນ, ຈົ່ງເບິ່ງ, ທູດຂອງພຣະຜູ້ເປັນເຈົ້າໄດ້
ມາຢືນຢູ່ຕໍ່ໜ້າພວກເຂົາ, ແລະ ເພິ່ນໄດ້ເວົ້າກັບພວກເຂົາ, ມີ
ຄວາມວ່າ: ເປັນຫຍັງພວກເຈົ້າຈຶ່ງຕີນ້ອງດ້ວຍໄມ້? ພວກເຈົ້າບໍ່
ຮູ້ຈັກບໍວ່າ ພຣະຜູ້ເປັນເຈົ້າໄດ້ເລືອກລາວໃຫ້ເປັນ ຜູ້ປົກຄອງ
ພວກເຈົ້າ, ແລະ ອັນນີ້ ເພາະຄວາມຊົ່ວຮ້າຍຂອງພວກເຈົ້າ? ຈົ່ງ
ເບິ່ງ, ພວກເຈົ້າຈົ່ງກັບຂຶ້ນໄປເຢຣູຊາເລັມອີກ, ແລະ ພຣະຜູ້ເປັນ
ເຈົ້າຈະມອບລາບານໃຫ້ຢູ່ໃນກຳມືຂອງພວກເຈົ້າ.

And it came to pass as they smote us with a rod, behold, an angel of the Lord came and stood before them, and he spake unto them, saying: Why do ye smite your younger brother with a rod? Know ye not that the Lord hath chosen him to be a ruler over you, and this because of your iniquities? Behold ye shall go up to Jerusalem again, and the Lord will deliver Laban into your hands.

ມ໐ ແລະ ຫລັງຈາກ ທູດໄດ້ເວົ້າກັບພວກເຮົາແລ້ວ, ເພີ່ນກໍຈາກ ໄປ.

ມ໑ ແລະ ຫລັງຈາກທູດໄດ້ຈາກໄປແລ້ວ, ເລມັນກັບເລມູເອນ ເລີ່ມຕົ້ນ ຈົ່ມອີກ, ໂດຍກ່າວວ່າ: ມັນເປັນໄປໄດ້ແນວໃດ ທີ່ພຣະຜູ້ ເປັນເຈົ້າຈະມອບລາບານໃຫ້ຢູ່ໃນກໍາມືຂອງພວກເຮົາ? ຈົ່ງເບິ່ງ, ລາວເປັນຄົນມີອໍານາດ, ແລະ ລາວຍັງບັນຊາຄົນໄດ້ອີກຫ້າສິບ ຄົນ, ແທ້ຈິງແລ້ວ, ເຖິງແມ່ນລາວຂ້າຄົນໄດ້ເຖິງຫ້າສິບຄົນ; ແລ້ວເປັນຫຍັງຈະຂ້າພວກເຮົາບໍ່ໄດ້?

And after the angel had spoken unto us, he departed.

And after the angel had departed, Laman and Lemuel again began to murmur, saying: How is it possible that the Lord will deliver Laban into our hands? Behold, he is a mighty man, and he can command fifty, yea, even he can slay fifty; then why not us?

๑ ນີໄຟ ๔

๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້າໄດ້ເວົ້າກັບພວກ
ອ້າຍ, ມີຄວາມວ່າ: ຂໍໃຫ້ພວກເຮົາຈົ່ງກັບຂຶ້ນໄປເຢຣູຊາເລັມອີກ,
ແລະ ຂໍໃຫ້ພວກເຮົາຈົ່ງ ຊື່ສັດໃນການຮັກສາພຣະບັນຍັດຂອງ
ພຣະຜູ້ເປັນເຈົ້າ; ເພາະຈົ່ງເບິ່ງ, ພຣະອົງມີອານຸພາບຍິ່ງກວ່າ
ຊາວໂລກທັງໝົດ, ແລ້ວເຫດໃດຈະບໍ່ມີ ອານຸພາບຍິ່ງກວ່າ
ລາບານກັບຄົນຫ້າສິບຄົນຂອງລາວ, ແທ້ຈິງແລ້ວ, ເຖິງແມ່ນ
ຄົນນັບໝື່ນຂອງລາວ?

๒ ສະນັ້ນ ຂໍໃຫ້ພວກເຮົາຂຶ້ນໄປ; ຂໍໃຫ້ພວກເຮົາຈົ່ງ ເຂັ້ມແຂງ
ເໝືອນດັ່ງ ໂມເຊ; ເພາະເພິ່ນໄດ້ເວົ້າກັບນ້ຳ ທະເລແດງແທ້ໆ
ແລະ ນ້ຳກໍໄດ້ແຍກອອກໄປທາງນັ້ນທາງນີ້, ແລະ ບັນພະບຸລຸດ
ຂອງພວກເຮົາໄດ້ເດີນຜ່ານມາເທິງແຜ່ນດິນແຫ້ງອອກຈາກ
ການເປັນຊະເລີຍ, ແລະ ກອງທັບຂອງຟາໂຣໄດ້ຕາມມາ ແລະ
ຈົມຢູ່ໃນນ້ຳທະເລແດງນັ້ນ

๓ ບັດນີ້ຈົ່ງເບິ່ງ ພວກເຈົ້າຮູ້ວ່າເລື່ອງນີ້ມີຈິງ; ແລະ ພວກເຈົ້າຮູ້
ອີກວ່າ ທູດໄດ້ເວົ້າກັບພວກເຈົ້າແລ້ວ; ດັ່ງນັ້ນ ດ້ວຍເຫດໃດ
ພວກເຈົ້າຈຶ່ງສົງໄສອີກ? ຂໍໃຫ້ພວກເຮົາຂຶ້ນໄປ; ພຣະຜູ້ເປັນເຈົ້າ
ສາມາດປົດປ່ອຍພວກເຮົາໄດ້, ເຖິງແມ່ນ ເໝືອນດັ່ງ
ບັນພະບຸລຸດຂອງພວກເຮົາ, ແລະ ທຳລາຍລາບານໄດ້, ເຖິງ
ແມ່ນເໝືອນດັ່ງຊາວເອຢິບ.

๔ ແລ້ວເມື່ອຂ້າພະເຈົ້າເວົ້າຄຳເຫລົ່ານີ້, ພວກເຂົາຍັງຄຽດແຄ້ນ,
ແລະ ຍັງຈົ່ມຢູ່ຕໍ່ໄປ; ເຖິງຢ່າງໃດກໍຕາມ ພວກເຂົາຍັງໄດ້
ຕິດຕາມຂ້າພະເຈົ້າຂຶ້ນມາ ຈົນພວກເຮົາມາເຖິງນອກກຳແພງ
ເມືອງເຢຣູຊາເລັມ.

๕ ແລະ ມັນເປັນຕອນກາງຄືນ; ແລະ ຂ້າພະເຈົ້າໄດ້ໃຫ້ພວກເຂົາ
ລີ້ຢູ່ນອກກຳແພງ. ແລະ ຫລັງຈາກພວກເຂົາລີ້ແລ້ວ, ຂ້າພະເຈົ້າ
ນີໄຟກໍຫລົບຫລີກເຂົ້າໄປໃນເມືອງ ແລະ ມຸ້ງໜ້າໄປທີ່ບ້ານຂອງ
ລາບານ.

๖ ແລະ ພຣະວິນຍານໄດ້ ນຳຂ້າພະເຈົ້າໄປ, ໂດຍບໍ່ ຮູ້ລ່ວງໜ້າ
ເຖິງສິ່ງທີ່ຂ້າພະເຈົ້າຄວນຈະເຮັດ.

๗ ເຖິງຢ່າງໃດກໍຕາມ ຂ້າພະເຈົ້າກໍເຂົ້າໄປ, ແລະ ເມື່ອຂ້າພະເຈົ້າ
ມາຮອດໃກ້ບ້ານຂອງລາບານ, ຂ້າພະເຈົ້າເຫັນຊາຍຄົນໜຶ່ງ,
ແລະ ລາວລົ້ມລົງຢູ່ກັບພື້ນດິນຕໍ່ໜ້າຂ້າພະເຈົ້າ, ເພາະລາວເມົາ
ເຫລົ້າອະງຸ່ນ.

๘ ແລະ ເມື່ອຂ້າພະເຈົ້າເຂົ້າໄປໃກ້ກໍພົບວ່າລາວຄືລາບານ.

๙ ແລະ ຂ້າພະເຈົ້າເຫັນ ດາບຂອງລາວ, ແລະ ຂ້າພະເຈົ້າດึງມັນ
ອອກຈາກຝັກ; ແລະ ດ້າມຂອງມັນເປັນຄຳສົດ, ແລະ ຝີມືອັນ
ປານີດທີ່ສຸດ, ແລະ ຂ້າພະເຈົ້າເຫັນວ່າ ໃບດາບເຮັດດ້ວຍເຫລັກ
ທີ່ມີຄ່າສູງທີ່ສຸດ.

1 Nephi 4

And it came to pass that I spake unto my brethren, saying: Let us go up again unto Jerusalem, and let us be faithful in keeping the commandments of the Lord; for behold he is mightier than all the earth, then why not mightier than Laban and his fifty, yea, or even than his tens of thousands?

Therefore let us go up; let us be strong like unto Moses; for he truly spake unto the waters of the Red Sea and they divided hither and thither, and our fathers came through, out of captivity, on dry ground, and the armies of Pharaoh did follow and were drowned in the waters of the Red Sea.

Now behold ye know that this is true; and ye also know that an angel hath spoken unto you; wherefore can ye doubt? Let us go up; the Lord is able to deliver us, even as our fathers, and to destroy Laban, even as the Egyptians.

Now when I had spoken these words, they were yet wroth, and did still continue to murmur; nevertheless they did follow me up until we came without the walls of Jerusalem.

And it was by night; and I caused that they should hide themselves without the walls. And after they had hid themselves, I, Nephi, crept into the city and went forth towards the house of Laban.

And I was led by the Spirit, not knowing beforehand the things which I should do.

Nevertheless I went forth, and as I came near unto the house of Laban I beheld a man, and he had fallen to the earth before me, for he was drunken with wine.

And when I came to him I found that it was Laban.

And I beheld his sword, and I drew it forth from the sheath thereof; and the hilt thereof was of pure gold, and the workmanship thereof was exceedingly fine, and I saw that the blade thereof was of the most precious steel.

๑๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະວິນຍານ ກະຕຸ້ນ ຂ້າພະເຈົ້າໃຫ້ຂ້າລາບານສາ, ແຕ່ຂ້າພະເຈົ້າຄິດຢູ່ໃນໃຈວ່າ: ຂ້າພະເຈົ້າບໍ່ເຄີຍເຮັດໃຫ້ຄົນໃດເສຍເລືອດເນື້ອຈັກເທື່ອ. ແລະ ຂ້າພະເຈົ້າຈຶ່ງຢຸດສະຫງັກບໍ່ຢາກຂ້າລາວ.

And it came to pass that I was constrained by the Spirit that I should kill Laban; but I said in my heart: Never at any time have I shed the blood of man. And I shrunk and would that I might not slay him.

๑๑ ແລະ ພຣະວິນຍານກ່າວກັບຂ້າພະເຈົ້າວ່າ: ຈົ່ງເບິ່ງ ພຣະຜູ້ ເປັນເຈົ້າມອບລາວໃຫ້ຢູ່ໃນກຳມືຂອງເຈົ້າ. ແທ້ຈິງແລ້ວ, ຂ້າພະເຈົ້າຮູ້ວ່າ ລາວພະຍາຍາມເອົາຊີວິດຂອງຂ້າພະເຈົ້າ ຢູ່ແລ້ວ; ແທ້ຈິງແລ້ວ, ລາວບໍ່ຍອມເຊື່ອຟັງພຣະບັນຍັດຂອງ ພຣະຜູ້ເປັນເຈົ້າ; ແລະ ລາວຍັງ ເອົາຊັບສົມບັດຂອງພວກເຮົາ ໄປນຳອີກ.

Yea, and I also knew that he had sought to take away mine own life; yea, and he would not hearken unto the commandments of the Lord; and he also had taken away our property.

And the Spirit said unto me again: Behold the Lord hath delivered him into thy hands.

๑๘ ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະວິນຍານໄດ້ກ່າວກັບ ຂ້າພະເຈົ້າອີກว່າ: ຈົ່ງຂ້າລາວສາ, ເພາະພຣະຜູ້ເປັນເຈົ້າມອບ ລາວໃຫ້ຢູ່ໃນກຳມືຂອງເຈົ້າແລ້ວ;

And it came to pass that the Spirit said unto me again: Slay him, for the Lord hath delivered him into thy hands;

๑๙ ຈົ່ງເບິ່ງ ພຣະຜູ້ເປັນເຈົ້າ ຂ້າ ຄົນຊົ່ວເພື່ອນຳເອົາຈຸດປະສົງອັນ ຊອບທຳຂອງພຣະອົງມາ. ການທີ່ຄົນຜູ້ດຽວຕາຍກໍ ດີກວ່າ ປະຊາຊາດຈະເສື່ອມໂຊມ ແລະ ຕາຍຢູ່ໃນຄວາມບໍ່ເຊື່ອຖື.

Behold the Lord slayeth the wicked to bring forth his righteous purposes. It is better that one man should perish than that a nation should dwindle and perish in unbelief.

๑๔ ແລະ ບັດນີ້, ເມື່ອຂ້າພະເຈົ້າມີໄຟໄດ້ຂໍ້ຄວາມນີ້, ຂ້າພະເຈົ້າ ນຶກເຖິງພຣະຄຳຂອງພຣະຜູ້ເປັນເຈົ້າ ຊຶ່ງໄດ້ຮັບສັ່ງກັບ ຂ້າພະເຈົ້າໃນຖິ່ນແຫ້ງແລ້ງກັນດານ, ທີ່ມີຄວາມວ່າ: ຕາບໃດທີ່ ລູກຫລານຂອງເຈົ້າຈະ ຮັກສາບັນຍັດຂອງເຮົາ, ພວກເຂົາຈະ ຮຸ່ງເຮືອງຢູ່ໃນ ແຜ່ນດິນແຫ່ງຄຳສັນຍາ.

And now, when I, Nephi, had heard these words, I remembered the words of the Lord which he spake unto me in the wilderness, saying that: Inasmuch as thy seed shall keep my commandments, they shall prosper in the land of promise.

๑๕ ແທ້ຈິງແລ້ວ, ຂ້າພະເຈົ້າຄິດອີກว່າ ພວກເຂົາຈະຮັກສາ ພຣະບັນຍັດຂອງພຣະຜູ້ເປັນເຈົ້າຕາມກົດຂອງໂມເຊບໍ່ໄດ້, ນອກຈາກພວກເຂົາຈະມີກົດບັງຄັບ.

Yea, and I also thought that they could not keep the commandments of the Lord according to the law of Moses, save they should have the law.

๑๖ ແລະ ຂ້າພະເຈົ້າຮູ້ອີກว່າ ກົດໄດ້ຈາລຶກຢູ່ໃນແຜ່ນຈາລຶກ ທອງເຫລືອງນັ້ນ.

And I also knew that the law was engraven upon the plates of brass.

๑๗ ແລະ ຂ້າພະເຈົ້າຮູ້ອີກว່າ ພຣະຜູ້ເປັນເຈົ້າມອບລາບານໃຫ້ ຢູ່ໃນກຳມືຂອງຂ້າພະເຈົ້າ ເພາະເຫດນີ້—ເພື່ອຂ້າພະເຈົ້າຈະໄດ້ ຮັບບັນທຶກຕາມພຣະບັນຍັດຂອງພຣະອົງ.

And again, I knew that the Lord had delivered Laban into my hands for this cause—that I might obtain the records according to his commandments.

๑๘ ສະນັ້ນ ຂ້າພະເຈົ້າໄດ້ເຊື່ອຟັງສຽງຮຽກຮ້ອງຂອງ ພຣະວິນຍານ, ແລະ ຂ້າພະເຈົ້າຈັບລາບານໂດຍລວບຜົມຂອງ ລາວ, ແລະ ຕັດຫົວຂອງລາວ ດ້ວຍ ດາບຂອງລາວເອງ.

Therefore I did obey the voice of the Spirit, and took Laban by the hair of the head, and I smote off his head with his own sword.

๑๙ ແລະ ຫລັງຈາກຂ້າພະເຈົ້າໄດ້ຕັດຫົວຂອງລາວດ້ວຍດາບ ຂອງລາວເອງແລ້ວ, ຂ້າພະເຈົ້າກໍເອົາເຄື່ອງແຕ່ງກາຍຂອງ ລາບານມາສວມໃສ່ຕົວຂອງຂ້າພະເຈົ້າເອງ; ແທ້ຈິງແລ້ວ, ແມ່ນ ທຸກຊິ້ນສ່ວນ; ແລະ ຂ້າພະເຈົ້າໄດ້ຄາດເກາະເຄື່ອງປ້ອງກັນຂອງ ລາວໄວ້ຮອບແອວ.

And after I had smitten off his head with his own sword, I took the garments of Laban and put them upon mine own body; yea, even every whit; and I did gird on his armor about my loins.

๘๐ ແລະ ຫລັງຈາກຂ້າພະເຈົ້າປ່ຽນເຄື່ອງແລ້ວ, ຂ້າພະເຈົ້າຈຶ່ງໄປ ຫາຄັງສົມບັດຂອງລາບານ. ແລະ ໃນຂະນະທີ່ຂ້າພະເຈົ້າມຸ້ງ ໜ້າໄປຫາຄັງສົມບັດຂອງລາບານຢູ່ນັ້ນ, ຈົ່ງເບິ່ງ, ຂ້າພະເຈົ້າ ເຫັນ ຄົນໃຊ້ຂອງລາບານຜູ້ຖືກະແจຄັງສົມບັດ. ແລະ ຂ້າພະເຈົ້າ ໄດ້ບັນຊາລາວດ້ວຍສຽງຂອງລາບານໃຫ້ລາວເຂົ້າໄປໃນຄັງ ສົມບັດກັບຂ້າພະເຈົ້າ.

And after I had done this, I went forth unto the treasury of Laban. And as I went forth towards the treasury of Laban, behold, I saw the servant of Laban who had the keys of the treasury. And I commanded him in the voice of Laban, that he should go with me into the treasury.

๘๑ ແລະ ລາວຄິດວ່າ ຂ້າພະເຈົ້າເປັນລາບານນາຍຂອງລາວ, ເພາະເຫັນເຄື່ອງແຕ່ງກາຍກັບດາບທີ່ຄາດຢູ່ແອວຂອງ ຂ້າພະເຈົ້າ.

And he supposed me to be his master, Laban, for he beheld the garments and also the sword girded about my loins.

๘๒ ແລະ ລາວກໍໄດ້ສົນທະນາກັບຂ້າພະເຈົ້າກ່ຽວກັບພວກຜູ້ ອາວຸໂສຂອງຊາວຢິວ, ໂດຍຮູ້ວ່າລາບານນາຍຂອງລາວ, ອອກໄປ ຢູ່ໃນບັນດາຄົນເຫລົ່ານັ້ນຕອນກາງຄືນ.

Nevertheless, for my name's sake will I defer mine anger, and for my praise will I refrain from thee, that I cut thee not off.

For, behold, I have refined thee, I have chosen thee in the furnace of affliction.

๑๑	ເພື່ອເຫັນແກ່ເຮົາ, ແທ້ຈິງແລ້ວ, ເພື່ອເຫັນແກ່ເຮົາ, ເຮົາຈະ ທຳການນີ້, ເພາະວ່າເຮົາຈະບໍ່ຍອມໃຫ້ ຊື່ຂອງເຮົາມີມົນທິນ, ແລະ ເຮົາຈະ ບໍ່ສະລະລັດສະໝີພາບຂອງເຮົາໃຫ້ແກ່ຜູ້ອື່ນ.	For mine own sake, yea, for mine own sake will I do this, for I will not suffer my name to be polluted, and I will not give my glory unto another.
๑๘	ຈົ່ງເຊື່ອຟັງເຮົາ, ໂอ້ ຢາໂຄບ, ແລະ ອິດສະຣາເอນ, ຜູ້ທີ່ເຮົາ ເອີ້ນແລ້ວ ເຮົາກໍຄືເຂົາ; ເຮົາເປັນຜູ້ ທຳອິດ ແລະ ເປັນຜູ້ສຸດທ້າຍ ນັ້ນ.	Hearken unto me, O Jacob, and Israel my called, for I am he; I am the first, and I am also the last.
๑๙	ມືຂອງເຮົາ ວາງພື້ນຖານຂອງແຜ່ນດິນໂລກ, ແລະ ມືຂວາ ຂອງເຮົາຄືບເຖິງຟ້າສະຫວັນ. ເຮົາເອີ້ນມັນ ແລະ ມັນພາກັນ ລຸກຂຶ້ນ.	Mine hand hath also laid the foundation of the earth, and my right hand hath spanned the heavens. I call unto them and they stand up together.
๑๔	ທ່ານທັງຫລາຍຈົ່ງຊຸມນຸມກັນ, ແລະ ຟັງ; ຜູ້ໃດໃນບັນດາ ພວກນັ້ນທີ່ປະກາດເລື່ອງເຫລົ່ານີ້ແກ່ພວກເຂົາ? ພຣະຜູ້ເປັນ ເจ້າຮັກຜູ້ນັ້ນ; ແທ້ຈິງແລ້ວ ແລະ ຜູ້ນັ້ນຈະເຮັດໃຫ້ພຣະຄຳຂອງ ພຣະອົງທີ່ພວກເຂົາປະກາດ ສຳເລັດ; ແລະ ພຣະອົງຈະເຮັດ ກັບ ບາບີໂลນຕາມພຣະໄຫຂອງພຣະອົງ ແລະ ແຂນຂອງ ພຣະອົງຈະມາຢູ່ເທິງຊາວເຄນເດຍ.	All ye, assemble yourselves, and hear; who among them hath declared these things unto them? The Lord hath loved him; yea, and he will fulfil his word which he hath declared by them; and he will do his pleasure on Babylon, and his arm shall come upon the Chaldeans.
๑๕	ພຣະຜູ້ເປັນເจ້າໄດ້ກ່າວອີກว່າ; ເຮົາພຣະຜູ້ເປັນເจ້າ, ແທ້ຈິງ ແລ້ວ, ເຮົາໄດ້ກ່າວไว้; ແທ້ຈິງແລ້ວ, ເຮົາໄດ້ເອີ້ນເຂົາໃຫ້ມາ ປະກາດ, ເຮົາພາເຂົາມາ, ແລະ ເຂົາຈະເຮັດທາງຂອງເຂົາໃຫ້ ຈະເລີນ.	Also, saith the Lord; I the Lord, yea, I have spoken; yea, I have called him to declare, I have brought him, and he shall make his way prosperous.
๑๖	ຈົ່ງເຂົ້າມາໃກ້ເຮົາ; ເຮົາບໍ່ໄດ້ເວົ້າໃນທີ່ ລີ້ລັບ; ຕັ້ງແต່ຕົ້ນ, ຕັ້ງແต່ເວລາທີ່ມີປະກາດເຮົາກໍເວົ້າແລ້ວ ແລະ ອົງພຣະຜູ້ເປັນ ເจ້າ ແລະ ພຣະວິນຍານຂອງພຣະອົງໄດ້ສົ່ງເຮົາມາ.	Come ye near unto me; I have not spoken in secret; from the beginning, from the time that it was declared have I spoken; and the Lord God, and his Spirit, hath sent me.
๑๗	ແລະ ພຣະຜູ້ເປັນເจ້າ, ພຣະຜູ້ໄຖ່ຂອງເจ້າ ແລະ ພຣະຜູ້ ບໍລິສຸດຂອງອິດສະຣາເอນໄດ້ກ່າວດັ່ງນີ້; ເຮົາໄດ້ສົ່ງເຂົາໄປ, ພຣະຜູ້ເປັນເจ້າອົງເປັນພຣະເจ້າຂອງເจ້າ, ຜູ້ສິດສອນເจ້າເພື່ອ ໃຫ້ເປັນປະໂຫຍດ, ຜູ້ ນຳພາເจ້າໄປຕາມທາງທີ່ເจ້າຄວນໄປ, ໄດ້ ເຮັດສິ່ງນັ້ນ.	And thus saith the Lord, thy Redeemer, the Holy One of Israel; I have sent him, the Lord thy God who teacheth thee to profit, who leadeth thee by the way thou shouldst go, hath done it.
๑๘	ໂอ້ ຖ້າເจ້າເຊື່ອຟັງ ບັນຍັດຂອງເຮົາ ເມື່ອນັ້ນສັນຕິສຸກຂອງ ເจ້າຈະເປັນດັ່ງແມ່ນ້ຳ—ແລະ ຄວາມຊອບທຳຂອງເจ້າຈະເປັນ ດັ່ງຄື້ນໃນທະເລ.	O that thou hadst hearkened to my commandments—then had thy peace been as a river, and thy righteousness as the waves of the sea.
๑๙	ແລະ ລູກຫລານຂອງເจ້າຈະເປັນດັ່ງດິນຊາຍ; ແລະ ລູກຜູ້ ອອກຈາກອຸທອນຂອງເจ້າກໍຈະເປັນເໝືອນດັ່ງເມັດຊາຍ; ຊື່ ຂອງເຂົາຈະບໍ່ຖືກຕັດອອກ ຫລື ຖືກທຳລາຍຕໍ່ໜ້າເຮົາ.	Thy seed also had been as the sand; the offspring of thy bowels like the gravel thereof; his name should not have been cut off nor destroyed from before me.
๘๐	ຈົ່ງ ອອກໄປຈາກບາບີໂลນ, ຈົ່ງໜີໄປຈາກຊາວເຄນເດຍ, ຈົ່ງ ປະກາດດ້ວຍສຽງເພງ, ຈົ່ງບອກເລື່ອງນີ້, ຈົ່ງອອກໄປສຸດ ແຜ່ນດິນໂลກ; ເจ້າຈົ່ງກ່າວว່າ: ພຣະຜູ້ເປັນເจ້າໄດ້ໄຖ່ຢາໂຄບ ຜູ້ຮັບໃຊ້ຂອງພຣະອົງແລ້ວ.	Go ye forth of Babylon, flee ye from the Chaldeans, with a voice of singing declare ye, tell this, utter to the end of the earth; say ye: The Lord hath redeemed his servant Jacob.

๘๑ ແລະ ພວກເຂົາບໍ່ໄດ້ ກະຫາຍນ້ຳເວລາພຣະອົງພາເຂົາໄປ ທາງທະເລຊາຍ; ພຣະອົງໄດ້ເຮັດໃຫ້ນ້ຳໄຫລອອກຈາກ ຫີນ ເພື່ອເຂົາ; ພຣະອົງໄດ້ຕີຫີນ ແລະ ນ້ຳໄດ້ພຸ່ງອອກມາ.

And they thirsted not; he led them through the deserts; he caused the waters to flow out of the rock for them; he clave the rock also and the waters gushed out.

๘๘ ທັງໆທີ່ພຣະອົງເຮັດໄປທັງໝົດນີ້ແລ້ວ, ແລະ ຫລວງຫລາຍ ກວ່ານີ້ອີກ, ກໍຍັງບໍ່ມີ ສັນຕິສຸກສຳລັບຄົນຊົ່ວ, ພຣະເຈົ້າໄດ້ກ່າວ ດັ່ງນີ້.

And notwithstanding he hath done all this, and greater also, there is no peace, saith the Lord, unto the wicked.

๑ ນີໄຟ ๘๑

๑ ແລະ ອີກເທື່ອໜຶ່ງ: ຈົ່ງເຊື່ອຟັງ, ໂອ້ ທ່ານຜູ້ເປັນເຊື້ອສາຍ ອິດສະຣາເອນ, ທ່ານທຸກຄົນທີ່ແຕກອອກມາ ແລະ ຖືກຂັບໄລ່ ໄປເພາະຄວາມຊົ່ວຮ້າຍຂອງພວກນັກທຳຂອງຜູ້ຄົນຂອງ ຂ້າພະເຈົ້າ; ແທ້ຈິງແລ້ວ, ທ່ານທຸກຄົນທີ່ແຕກອອກມາ ແລະ ກະຈັດກະຈາຍໄປຕ່າງຖິ່ນຖານ ຜູ້ທີ່ເປັນຄົນຂອງຂ້າພະເຈົ້າ, ໂອ້ ເຊື້ອສາຍອິດສະຣາເອນເອີຍ. ຈົ່ງຟັງ, ໂອ້ ເກາະເອີຍ, ຈົ່ງຟັງ ຂ້າພະເຈົ້າ, ແລະ ຈົ່ງເຊື່ອຟັງຄົນຂອງທ່ານຜູ້ທີ່ຢູ່ ໄກ; ພຣະເຈົ້າ ໄດ້ເອີ້ນຂ້າພະເຈົ້າຕັ້ງແຕ່ຂ້າພະເຈົ້າຢູ່ໃນທ້ອງ; ພຣະອົງໄດ້ບົ່ງຊື່ ຂອງຂ້າພະເຈົ້າຕັ້ງແຕ່ຂ້າພະເຈົ້າຢູ່ໃນອຸທອນແມ່ຂອງ ຂ້າພະເຈົ້າ.

And again: Hearken, O ye house of Israel, all ye that are broken off and are driven out because of the wickedness of the pastors of my people; yea, all ye that are broken off, that are scattered abroad, who are of my people, O house of Israel. Listen, O isles, unto me, and hearken ye people from far; the Lord hath called me from the womb; from the bowels of my mother hath he made mention of my name.

๒ ແລະ ພຣະອົງໄດ້ເຮັດໃຫ້ປາກຂອງຂ້າພະເຈົ້າເປັນຄືກັນກັບ ດາບທີ່ແຫລມຄົມ; ພຣະອົງໄດ້ເຊື່ອງຂ້າພະເຈົ້າໃນຮົ່ມພຣະຫັດ ຂອງພຣະອົງ, ແລະ ໄດ້ເຮັດໃຫ້ຂ້າພະເຈົ້າເປັນລູກສອນທີ່ ເຫລື້ອມເປັນເງົາ;

And he hath made my mouth like a sharp sword; in the shadow of his hand hath he hid me, and made me a polished shaft; in his quiver hath he hid me;

๓ ແລະ ໄດ້ກ່າວກັບຂ້າພະເຈົ້າວ່າ: ເຈົ້າຄືຜູ້ ຮັບໃຊ້ຂອງເຮົາ, ໂອ້ ອິດສະຣາເອນເອີຍ, ໃນເຈົ້າເຮົາຈະໄດ້ຮັບກຽດຕິຍົດ.

And said unto me: Thou art my servant, O Israel, in whom I will be glorified.

๔ ຫລັງຈາກນັ້ນ ຂ້າພະເຈົ້າໄດ້ເວົ້າວ່າ ຂ້າພະເຈົ້າໄດ້ອອກ ແຮງງານໂດຍບໍ່ມີປະໂຫຍດ; ຂ້າພະເຈົ້າໄດ້ເປືອງແຮງຂອງຂ້າ ພະເຈົ້າລ້າງ ແລະ ບໍ່ມີປະໂຫຍດ; ແຕ່ແນ່ນອນ ຄວາມຍຸດຕິທຳ ອັນຄວນຕົກແກ່ຂ້າພະເຈົ້າຢູ່ກັບພຣະຜູ້ເປັນເຈົ້າ, ແລະ ຄ່າ ຕອບແທນຂອງຂ້າພະເຈົ້ານັ້ນຢູ່ກັບພຣະເຈົ້າຂອງຂ້າພະເຈົ້າ.

Then I said, I have labored in vain, I have spent my strength for naught and in vain; surely my judgment is with the Lord, and my work with my God.

๕ ແລະ ບັດນີ້, ພຣະຜູ້ເປັນເຈົ້າໄດ້ກ່າວ—ຜູ້ ປັ້ນຂ້າພະເຈົ້າ ຕັ້ງແຕ່ຢູ່ໃນທ້ອງເພື່ອຂ້າພະເຈົ້າຈະໄດ້ເປັນຜູ້ຮັບໃຊ້ຂອງ ພຣະອົງ ເພື່ອຈະນຳຢາໂຄບມາຫາພຣະອົງ—ເຖິງແມ່ນ ອິດສະຣາເອນບໍ່ໄດ້ມາຮ່ວມກັນ, ຂ້າພະເຈົ້າກໍຍັງຈະມີກຽດໃນ ສາຍພຣະເນດຂອງພຣະຜູ້ເປັນເຈົ້າ, ແລະ ພຣະເຈົ້າຂອງ ຂ້າພະເຈົ້າຈະເປັນກຳລັງໃຫ້ຂ້າພະເຈົ້າ.

And now, saith the Lord—that formed me from the womb that I should be his servant, to bring Jacob again to him—though Israel be not gathered, yet shall I be glorious in the eyes of the Lord, and my God shall be my strength.

๖ ແລະ ພຣະອົງກ່າວว่า: ມັນເປັນການເລັກໜ້ອຍທີ່ເຈົ້າຈະ ເປັນຜູ້ຮັບໃຊ້ຂອງເຮົາ ເພື່ອສະຖາປະນາ ເຜົ່າຕ່າງໆຂອງ ຢາໂຄບ ແລະ ເພື່ອນຳຊາວອິດສະຣາເອນທີ່ເກັບຮັກສາໄວ້ກັບ ຄືນມາ ແລະ ເຮົາຈະໃຫ້ເຈົ້າເປັນ ແສງສະຫว่າງແກ່ ຄົນຕ່າງ ຊາດນຳອີກ, ເພື່ອເຈົ້າຈະໄດ້ເປັນຄວາມລອດຂອງເຮົາທີ່ໃຫ້ແກ່ ທີ່ສຸດຂອງແຜ່ນດິນໂລກ.

And he said: It is a light thing that thou shouldst be my servant to raise up the tribes of Jacob, and to restore the preserved of Israel. I will also give thee for a light to the Gentiles, that thou mayest be my salvation unto the ends of the earth.

๗ ພຣະຜູ້ເປັນເຈົ້າ ພຣະຜູ້ໄຖ່ຂອງອິດສະຣາເອນ, ພຣະຜູ້ ບໍລິສຸດຂອງພຣະອົງໄດ້ກ່າວດັ່ງນີ້, ພຣະອົງຜູ້ທີ່ມະນຸດໝິ່ນ ປະໝາດ, ຕໍ່ພຣະອົງຜູ້ທີ່ປະຊາຊາດລັງກຽດ, ຕໍ່ຜູ້ຮັບໃຊ້ຂອງ ຜູ້ປົກຄອງ: ກະສັດຈະເຫັນ ແລະ ລຸກຂຶ້ນ, ເຈົ້າຊາຍຈະ ນະມັດສະການເຊັ່ນກັນ, ເພາະພຣະຜູ້ເປັນເຈົ້າຜູ້ຊື່ສັດ.

Thus saith the Lord, the Redeemer of Israel, his Holy One, to him whom man despiseth, to him whom the nations abhorreth, to servant of rulers: Kings shall see and arise, princes also shall worship, because of the Lord that is faithful.

Ხ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ໃນເວລາໂປດປານ ເຮົາໄດ້ຍິນ ເຈົ້າ, ໂອ້ ເກາະໃນທະເລ ແລະ ໃນວັນແຫ່ງຄວາມລອດ ເຮົາໄດ້ ຊ່ວຍເຈົ້າ ແລະ ເຮົາຈະຮັກສາເຈົ້າ; ແລະ ມອບ ຜູ້ຮັບໃຊ້ຂອງເຮົາ ໃຫ້ແກ່ເຈົ້າ ເພື່ອເປັນພັນທະສັນຍາຂອງຜູ້ຄົນ ເພື່ອ ສະຖາປະນາແຜ່ນດິນໂລກ ເພື່ອໃຫ້ໄດ້ຮັບມູນມໍລະດົກທີ່ຮ້າງ ວ່າງເປົ່າ;

Thus saith the Lord: In an acceptable time have I heard thee, O isles of the sea, and in a day of salvation have I helped thee; and I will preserve thee, and give thee my servant for a covenant of the people, to establish the earth, to cause to inherit the desolate heritages;

Ჯ ເພື່ອເຈົ້າຈະກ່າວກັບ ນັກโทດວ່າ: ຈົ່ງອອກໄປ; ກັບຜູ້ທີ່ນັ່ງ ຢູ່ໃນ ຄວາມມືດວ່າ: ຈົ່ງສະແດງຕົວຂອງເຈົ້າ ເຂົາຈະມີອາຫານ ການກິນຕາມທາງ ແລະ ບ່ອນສູງທຸກແຫ່ງຈະເປັນ ບ່ອນຫາ ກິນຂອງເຂົາ.

That thou mayest say to the prisoners: Go forth; to them that sit in darkness: Show yourselves. They shall feed in the ways, and their pastures shall be in all high places.

ᲰᲐ ເຂົາຈະບໍ່ຫິວເຂົ້າ ແລະ ບໍ່ກະຫາຍນ້ຳ, ຄວາມຮ້ອນ ແລະ ແສງແດດຈະບໍ່ເຜົາໄຫມ້ເຂົາ ເພາະພຣະອົງໄດ້ເມດຕາເຂົາ, ແລະ ຈະນຳເຂົາໄປເຖິງແມ່ນຕາມແຫລ່ງນ້ຳ ພຣະອົງກໍຈະນຳ ເຂົາໄປ.

They shall not hunger nor thirst, neither shall the heat nor the sun smite them; for he that hath mercy on them shall lead them, even by the springs of water shall he guide them.

ᲱᲐ ແລະ ເຮົາຈະເຮັດໃຫ້ພູເຂົາທັງໝົດຂອງເຮົາເປັນທາງ ແລະ ທາງຫລວງຂອງເຮົາສູງຂຶ້ນ.

And I will make all my mountains a way, and my highways shall be exalted.

ᲱᲑ ແລະ ເມື່ອນັ້ນ ໂອ້ ເຊື້ອສາຍອິດສະຣາເອນເອີຍ, ຈົ່ງເບິ່ງ, ຄົນ ເຫລົ່ານີ້ ຈະມາຈາກທາງໄກ ແລະ ບາງຈຳພວກຈະມາຈາກທາງ ເໜືອ ແລະ ຈາກທາງຕາເວັນຕົກ ແລະ ບາງຈຳພວກຈະມາຈາກ ແຜ່ນດິນຊີນິມ.

And then, O house of Israel, behold, these shall come from far; and lo, these from the north and from the west; and these from the land of Sinim.

ᲱᲒ ໂອ້ ຟ້າສະຫວັນ, ຈົ່ງ ຮ້ອງເພງເຖີດ; ໂອ້ ແຜ່ນດິນ, ຈົ່ງ ປິຕິຍິນດີເຖີດ; ເພາະຕີນຂອງຄົນທີ່ຢູ່ທາງຕາເວັນອອກຈະມີ ບ່ອນຮັບຮອງ; ແລະ ໂອ້ ພູເຂົາຈົ່ງເປັ່ງສຽງຮ້ອງເພງເຖີດ ເພາະ ເຂົາຈະບໍ່ຖືກລົງທັນອີກຕໍ່ໄປ; ເພາະພຣະເຈົ້າປອບໂຍນຜູ້ຄົນ ຂອງພຣະອົງແລ້ວ ແລະ ຈະເມດຕາຄົນຂອງພຣະອົງຜູ້ທີ່ ເປັນທຸກ.

Sing, O heavens; and be joyful, O earth; for the feet of those who are in the east shall be established; and break forth into singing, O mountains; for they shall be smitten no more; for the Lord hath comforted his people, and will have mercy upon his afflicted.

ᲱᲓ ແຕ່ຈົ່ງເບິ່ງ, ຊີໂອນກ່າວว่า: ພຣະຜູ້ເປັນເຈົ້າຄົງປະປ່ອຍຂ້າ ນ້ອຍແລ້ວ, ແລະ ພຣະຜູ້ເປັນເຈົ້າຂອງຂ້ານ້ອຍ ຄົງລືມຂ້ານ້ອຍ ແລ້ວ—ແຕ່ພຣະອົງຈະສະແດງว่า ພຣະອົງຈະບໍ່ກະທຳເຊັ່ນ ນັ້ນ.

But, behold, Zion hath said: The Lord hath forsaken me, and my Lord hath forgotten me—but he will show that he hath not.

ᲱᲔ ຜູ້ຍິງຈະລືມລູກທີ່ຍັງກິນນົມຂອງນາງ ແລະ ຈະບໍ່ມີເມດຕາ ສົງສານລູກທີ່ເກີດຈາກອຸທອນຂອງນາງບໍ? ແທ້ຈິງແລ້ວ, ນາງ ອາດ ລືມໄດ້, ແຕ່ເຮົາຈະບໍ່ລືມເຈົ້າ, ໂອ້ ເຊື້ອສາຍອິດສະຣາເອນ.

For can a woman forget her sucking child, that she should not have compassion on the son of her womb? Yea, they may forget, yet will I not forget thee, O house of Israel.

ᲱᲕ ຈົ່ງເບິ່ງ, ເຮົາຈາລຶກເຈົ້າໄວ້ໃນ ຝາມືຂອງເຮົາ; ກຳແພງເມືອງ ຂອງເຈົ້າຢູ່ຕໍ່ໜ້າເຮົາຕະຫລອດເວລາ.

Behold, I have graven thee upon the palms of my hands; thy walls are continually before me.

ᲱᲖ ລູກຫລານຂອງເຈົ້າຈະຟ້າວຕໍ່ຕ້ານຜູ້ທຳລາຍເຈົ້າ; ແລະ ຜູ້ທີ່ ເຮັດໃຫ້ເຈົ້າ ເສຍຫາຍຈະໄປຈາກເຈົ້າ.

Thy children shall make haste against thy destroyers; and they that made thee waste shall go forth of thee.

ຈົ່ງຫລຽວເບິ່ງອ້ອມຮອບຄົນທັງໝົດນີ້ມາ ລວມກັນ ແລະ ເຂົາຈະມາຫາເຈົ້າ, ພຣະຜູ້ເປັນເຈົ້າໄດ້ກ່າວว่า ເຮົາມີຊີວິດຢູ່ສັນໃດ ເຈົ້າຈະໄດ້ເຂົາທຸກຄົນມາເປັນເຄື່ອງນຸ່ງຫົ່ມຂອງເຈົ້າ ເໝືອນກັບເຄື່ອງປະດັບ ແລະ ຜູກມັດໄວ້ເໝືອນດັ່ງເຈົ້າສາວສັນນັ້ນ.

ເພາະບ່ອນທີ່ບໍ່ມີປະໂຫຍດ ແລະ ບ່ອນທີ່ແຫ້ງແລ້ງ, ແລະ ແຜ່ນດິນແຫ່ງຄວາມພິນາດຂອງເຈົ້າຈົນກະທັ້ງບັດນີ້ຈະແຄບເກີນໄປ ເພາະຄ້ວຍຜູ້ອາໄສ; ແລະ ພວກທີ່ກືນກິນເຈົ້າຈະຫ່າງໄກໄປຈາກເຈົ້າ.

ລູກຫລານທີ່ເຈົ້າຈະມີຫລັງຈາກເຈົ້າສູນເສຍພວກທຳອິດໄປ ຈະເວົ້າເຂົ້າຫູຂອງເຈົ້າວ່າ: ບ່ອນນີ້ ແຄບເກີນໄປສຳລັບລູກ; ຈົ່ງຫາບ່ອນໃໝ່ໃຫ້ລູກຢູ່ເຖີດ.

ເມື່ອນັ້ນ ເຈົ້າຈະກ່າວຢູ່ໃນໃຈว่า: ແມ່ນໃຜໜໍເກີດຄົນເຫລົ່ານີ້ໃຫ້ເຮົາ, ເມື່ອເຫັນເຮົາສູນເສຍລູກຫລານຂອງເຮົາໄປ, ແລະ ເຮົາເປັນຜູ້ ສູນເສຍທຸກສິ່ງ, ເປັນຊະເລີຍ ແລະ ຍົກຍ້າຍໄປມາ? ແມ່ນຜູ້ໃດໜໍລ້ຽງດູຄົນເຫລົ່ານີ້? ຈົ່ງເບິ່ງ ເຮົາຖືກປະຖິ້ມໄວ້ຕາມລຳພັງ ຄົນເຫລົ່ານີ້ໄປຢູ່ບ່ອນໃດມາ?

ອົງພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ຈົ່ງເບິ່ງ, ເຮົາຈະຍົກມືກວັກຄົນຕ່າງຊາດ ແລະ ຍົກ ສັນຍານຂອງເຮົາຕໍ່ຜູ້ຄົນ; ແລະ ເຂົາຈະອູ້ມລູກຊາຍຂອງເຈົ້າມາໃນອ້ອມ ແຂນຂອງເຂົາ, ແລະ ສ່ວນລູກສາວຂອງເຈົ້ານັ້ນ ເຂົາຈະໃສ່ບ່າແບກມາ.

ແລະ ກະສັດຈະເປັນ ພໍ່ລ້ຽງຂອງເຈົ້າ ແລະ ລາຊິນີທັງຫລາຍຈະເປັນແມ່ລ້ຽງຂອງເຈົ້າ; ເຂົາເຫລົ່ານັ້ນຈະກົ້ມໜ້າລົງເຖິງດິນກາບເຈົ້າ, ເຂົາຈະເລຍຂີ້ຝຸ່ນທີ່ຕີນຂອງເຈົ້າ; ແລ້ວເຈົ້າຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າ; ຜູ້ທີ່ ລໍຄອຍເຮົາຈະບໍ່ປະສົບຄວາມອາຍ.

ຈະເອົາເຫຍື່ອໄປຈາກຜູ້ທີ່ມີກຳລັງ ຫລື ຈະຊ່ວຍ ຊະເລີຍຂອງຜູ້ຊະນະໃຫ້ພົ້ນໄດ້ບໍ?

ແຕ່ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ເຖິງແມ່ນຊະເລີຍຂອງຄົນທີ່ຍິ່ງໃຫຍ່ກໍຈະຖືກເອົາໄປ, ແລະ ເຫຍື່ອຂອງຄົນທີ່ຫ້ຽມໂຫດກໍຈະຖືກຊ່ວຍໃຫ້ພົ້ນ; ເພາະເຮົາຈະຕໍ່ສູ້ກັບຜູ້ທີ່ຕໍ່ສູ້ເຈົ້າ, ແລະ ເຮົາຈະຊ່ວຍລູກຫລານຂອງເຈົ້າໃຫ້ລອດ.

ແລະ ເຮົາຈະ ໃຫ້ຜູ້ບີບບັງຄັບເຈົ້າກິນເນື້ອຂອງຕົນເອງ; ແລະ ເຂົາຈະເມົາເລືອດຂອງເຂົາເອງເໝືອນເມົາເຫລົ້າອະງຸ່ນ; ແລະ ມະນຸດທັງປວງຈະ ຮູ້ວ່າເຮົາ, ພຣະຜູ້ເປັນເຈົ້າ, ຄືພຣະຜູ້ຊ່ວຍ ໃຫ້ລອດ ແລະ ພຣະຜູ້ໄຖ່ຂອງເຈົ້າ, ແລະ ພຣະຜູ້ມີລິດທານຸ ພາບຂອງຢາໂຄບ.

Lift up thine eyes round about and behold; all these gather themselves together, and they shall come to thee. And as I live, saith the Lord, thou shalt surely clothe thee with them all, as with an ornament, and bind them on even as a bride.

For thy waste and thy desolate places, and the land of thy destruction, shall even now be too narrow by reason of the inhabitants; and they that swallowed thee up shall be far away.

The children whom thou shalt have, after thou hast lost the first, shall again in thine ears say: The place is too strait for me; give place to me that I may dwell.

Then shalt thou say in thine heart: Who hath begotten me these, seeing I have lost my children, and am desolate, a captive, and removing to and fro? And who hath brought up these? Behold, I was left alone; these, where have they been?

Thus saith the Lord God: Behold, I will lift up mine hand to the Gentiles, and set up my standard to the people; and they shall bring thy sons in their arms, and thy daughters shall be carried upon their shoulders.

And kings shall be thy nursing fathers, and their queens thy nursing mothers; they shall bow down to thee with their face towards the earth, and lick up the dust of thy feet; and thou shalt know that I am the Lord; for they shall not be ashamed that wait for me.

For shall the prey be taken from the mighty, or the lawful captives delivered?

But thus saith the Lord, even the captives of the mighty shall be taken away, and the prey of the terrible shall be delivered; for I will contend with him that contendeth with thee, and I will save thy children.

And I will feed them that oppress thee with their own flesh; they shall be drunken with their own blood as with sweet wine; and all flesh shall know that I, the Lord, am thy Savior and thy Redeemer, the Mighty One of Jacob.

๑ ນີໄຟ ๘๘

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກຂ້າພະເຈົ້ານີໄຟ ໄດ້ອ່ານເລື່ອງເຫລົ່ານີ້ທີ່ມີຈາລຶກໄວ້ໃນ ແຜ່ນຈາລຶກ ທອງເຫລືອງແລ້ວ, ພວກອ້າຍຂອງຂ້າພະເຈົ້າໄດ້ມາຫາ ຂ້າພະເຈົ້າ ແລະ ຖາມວ່າ: ເລື່ອງທີ່ເຈົ້າອ່ານມານັ້ນໝາຍຄວາມ ວ່າແນວໃດ? ຈົ່ງເບິ່ງ, ຈະໃຫ້ພວກເຮົາເຂົ້າໃຈເລື່ອງເຫລົ່ານີ້ວ່າ ມັນເປັນຕາມເລື່ອງທາງວິນຍານທີ່ຈະເກີດຂຶ້ນຝ່າຍວິນຍານ ແລະ ບໍ່ແມ່ນຝ່າຍເນື້ອໜັງບໍ?

๒ ແລະ ຂ້າພະເຈົ້າມີໄຟກ່າວກັບພວກເຂົາວ່າ: ຈົ່ງເບິ່ງ ເລື່ອງ ເຫລົ່ານີ້ໄດ້ຖືກ ສະແດງໃຫ້ປະຈັກແກ່ ສາດສະດາໂດຍສຸລະສຽງ ຂອງພຣະວິນຍານ; ເພາະໂດຍ ພຣະວິນຍານທຸກຢ່າງທີ່ຈະເກີດ ກັບລູກຫລານມະນຸດຕາມທາງເນື້ອໜັງຍ່ອມເປັນທີ່ຮູ້ແກ່ສາດ ສະດາ.

๓ ດັ່ງນັ້ນ, ເລື່ອງທີ່ເຮົາອ່ານມານັ້ນ ຈຶ່ງເປັນເລື່ອງກ່ຽວກັບທັງ ຝ່າຍໂລກ ແລະ ຝ່າຍວິນຍານເພາະເບິ່ງວ່າບໍ່ຊ້າກໍໄວທີ່ເຊື້ອສາຍ ອິດສະຣາເອນຈະ ກະຈັດກະຈາຍໄປທົ່ວຜືນແຜ່ນດິນໂລກ ແລະ ໃນບັນດາປະຊາຊາດທັງປວງນຳອີກ.

๔ ແລະ ຈົ່ງເບິ່ງ, ມີຄົນຈຳນວນຫລວງຫລາຍທີ່ຫາຍສາບສູນ ໄປແລ້ວຈາກຄວາມຮູ້ຂອງຜູ້ທີ່ຢູ່ໃນເຢຣູຊາເລັມ. ແທ້ຈິງແລ້ວ, ສ່ວນໃຫຍ່ຂອງຄົນທຸກ ເຜົ່າໄດ້ຖືກ ພາໄປ; ແລະ ເຂົາໄດ້ກະຈັດ ກະຈາຍໄປຕາມ ເກາະໃນທະເລ; ແລະ ເຂົາຢູ່ໃສບໍ່ມີໃຜໃນພວກ ເຮົາຮູ້ເລີຍ, ນອກຈາກພວກເຮົາຮູ້ມາວ່າເຂົາໄດ້ຖືກພາໄປເທົ່າ ນັ້ນ.

๕ ແລະ ເມື່ອງຈາກເຂົາຖືກພາໄປ ຈຶ່ງມີສາດສະດາທຳນາຍເຖິງ ເລື່ອງເຫລົ່ານີ້ ຊຶ່ງກ່ຽວກັບເຂົາ ແລະ ກ່ຽວກັບທຸກຄົນຊຶ່ງຕໍ່ຈາກ ນີ້ຈະກະຈັດກະຈາຍໄປ ແລະ ສັບສົນເພາະພຣະຜູ້ບໍລິສຸດຂອງ ອິດສະຣາເອນ; ເພາະເຂົາເຮັດໃຈແຂງກະດ້າງຕໍ່ພຣະອົງ; ດັ່ງນັ້ນ, ເຂົາຈຶ່ງຈະກະຈັດກະຈາຍໄປໃນບັນດາປະຊາຊາດ ທັງປວງ ແລະ ຈະເປັນທີ່ ກຽດຊັງຂອງທຸກຄົນ.

๖ ເຖິງຢ່າງໃດກໍຕາມ, ຫລັງຈາກເຂົາໄດ້ຮັບການ ບຳລຸງລ້ຽງດູ ຈາກ ຄົນຕ່າງຊາດແລ້ວ, ພຣະເຈົ້າຍົກພຣະຫັດໃຫ້ຄົນຕ່າງ ຊາດ, ແລະ ຕັ້ງເຂົາໄວ້ເປັນຫລັກສັນຍານ, ແລະ ລູກຫລານຂອງ ເຂົາຈະຖືກອູ້ມມາໃນອ້ອມແຂນ ແລະ ລູກສາວຂອງເຂົາຈະຖືກ ແບກມາເທິງບ່າ, ຈົ່ງເບິ່ງ ເລື່ອງເຫລົ່ານີ້ ຊຶ່ງມີເວົ້າໄວ້ເປັນເລື່ອງ ຝ່າຍໂລກ; ເພາະພັນທະສັນຍາຂອງພຣະຜູ້ເປັນເຈົ້າກັບ ບັນພະບຸລຸດຂອງພວກເຮົາເປັນດັ່ງນັ້ນ; ແລະ ໝາຍເຖິງພວກ ເຮົາໃນວັນທີ່ຈະມາເຖິງ, ແລະ ພີ່ນ້ອງທຸກຄົນຂອງພວກເຮົາທີ່ ເປັນເຊື້ອສາຍອິດສະຣາເອນນຳອີກ.

1 Nephi 22

And now it came to pass that after I, Nephi, had read these things which were engraven upon the plates of brass, my brethren came unto me and said unto me: What meaneth these things which ye have read? Behold, are they to be understood according to things which are spiritual, which shall come to pass according to the spirit and not the flesh?

And I, Nephi, said unto them: Behold they were manifest unto the prophet by the voice of the Spirit; for by the Spirit are all things made known unto the prophets, which shall come upon the children of men according to the flesh.

Wherefore, the things of which I have read are things pertaining to things both temporal and spiritual; for it appears that the house of Israel, sooner or later, will be scattered upon all the face of the earth, and also among all nations.

And behold, there are many who are already lost from the knowledge of those who are at Jerusalem. Yea, the more part of all the tribes have been led away; and they are scattered to and fro upon the isles of the sea; and whither they are none of us knoweth, save that we know that they have been led away.

And since they have been led away, these things have been prophesied concerning them, and also concerning all those who shall hereafter be scattered and be confounded, because of the Holy One of Israel; for against him will they harden their hearts; wherefore, they shall be scattered among all nations and shall be hated of all men.

Nevertheless, after they shall be nursed by the Gentiles, and the Lord has lifted up his hand upon the Gentiles and set them up for a standard, and their children have been carried in their arms, and their daughters have been carried upon their shoulders, behold these things of which are spoken are temporal; for thus are the covenants of the Lord with our fathers; and it meaneth us in the days to come, and also all our brethren who are of the house of Israel.

ᾳ ແລະ ໝາຍຄວາມວ່າ ເວລາຈະມາເຖິງຄື ຫລັງຈາກເຊື້ອສາຍ ອິດສະຣາເອນທັງໝົດໄດ້ກະຈັດກະຈາຍໄປ ແລະ ສັບສົນແລ້ວ, ອົງພຣະຜູ້ເປັນເຈົ້າຈະຍົກປະເທດທີ່ຍິ່ງໃຫຍ່ປະເທດໜຶ່ງຂຶ້ນໃນ ບັນດາ ຄົນຕ່າງຊາດ, ແທ້ຈິງແລ້ວ, ມັນແມ່ນຜືນແຜ່ນດິນນີ້ ແລະ ໂດຍພວກເຂົາລູກຫລານຂອງພວກເຮົາຈົ່ງຈະ ກະຈັດ ກະຈາຍໄປ.

ᾳ ແລະ ຫລັງຈາກທີ່ລູກຫລານຂອງພວກເຮົາໄດ້ກະຈັດ ກະຈາຍໄປແລ້ວ ອົງພຣະຜູ້ເປັນເຈົ້າຈະເຮັດ ສິ່ງອັດສະຈັນຢ່າງ ໜຶ່ງໃນບັນດາ ຄົນຕ່າງຊາດ ຊຶ່ງຈະ ມີຄຸນຄ່າທີ່ຍິ່ງໃຫຍ່ກັບລູກ ຫລານຂອງພວກເຮົາ; ດັ່ງນັ້ນ, ມັນຈຶ່ງເປັນເໝືອນກັບພວກ ເຂົາຖືກບຳລຸງລ້ຽງຈາກຄົນຕ່າງຊາດ ແລະ ຖືກອູ້ມມາໃນອ້ອມ ແຂນຂອງພວກເຂົາ ແລະ ແບກໃສ່ບ່າຂອງພວກເຂົາມາ.

ᾳ ແລະ ມັນຈະ ມີຄຸນຄ່າກັບຄົນຕ່າງຊາດ, ແລະ ບໍ່ພຽງແຕ່ກັບ ຄົນຕ່າງຊາດເທົ່ານັ້ນ ແຕ່ ຍັງມີຄຸນຄ່າກັບ ເຊື້ອສາຍ ອິດສະຣາເອນທັງໝົດນຳອີກ, ໃນວັນທີ່ຈະໃຫ້ຮູ້ຈັກເຖິງ ພັນທະສັນຍາຂອງພຣະບິດາເທິງສະຫວັນທີ່ຊົງກະທຳໄວ້ກັບ ອັບຣາຮາມ, ໂດຍກ່າວວ່າ: ໃນ ລູກຫລານຂອງເຈົ້າທຸກຕະກຸນ ຂອງແຜ່ນດິນໂລກຈະໄດ້ ຮັບພອນ.

ᾳ ແລະ ພວກອ້າຍຂອງເຮົາເອີຍ, ເຮົາຢາກໃຫ້ພວກເຈົ້າຮູ້ວ່າ ທຸກຕະກຸນຂອງແຜ່ນດິນໂລກຈະຮັບພອນບໍ່ໄດ້ ເວັ້ນເສຍແຕ່ ພຣະອົງຈະ ກາງແຂນຂອງພຣະອົງຕໍ່ສາຍຕາຂອງປະຊາຊາດ ເສຍກ່ອນ.

ᾳ ດັ່ງນັ້ນ, ອົງພຣະຜູ້ເປັນເຈົ້າຈະດຳເນີນການກາງແຂນຂອງ ພຣະອົງຕໍ່ສາຍຕາຂອງປະຊາຊາດ, ໂດຍນຳເອົາພັນທະສັນຍາ ຂອງພຣະອົງ ແລະ ພຣະກິດຕິຄຸນຂອງພຣະອົງມາໃຫ້ຜູ້ທີ່ເປັນ ເຊື້ອສາຍອິດສະຣາເອນ.

ᾳ ດັ່ງນັ້ນ, ພຣະອົງຈະນຳພວກເຂົາອອກມາຈາກການເປັນ ຊະເລີຍນຳອີກ, ແລະ ພວກເຂົາຈະຖືກ ເຕົ້າໂຮມເຂົ້າມາຫາ ແຜ່ນດິນຊຶ່ງເປັນມູນມໍລະດົກຂອງພວກເຂົາ; ແລະ ພວກເຂົາ ຈະຖືກນຳອອກຈາກການປິດບັງ ແລະ ອອກຈາກ ຄວາມມືດ; ແລະ ພວກເຂົາຈະຮູ້ຈັກว່າ ພຣະຜູ້ເປັນເຈົ້າຄື ພຣະຜູ້ຊ່ວຍໃຫ້ ລອດ ແລະ ພຣະຜູ້ໄຖ່ຂອງພວກເຂົາ, ພຣະຜູ້ມີລິດທານຸພາບ ຂອງອິດສະຣາເອນ.

ᾳ ແລະ ເລືອດຂອງສາດສະໜາຈັກໃຫຍ່ ແລະ ໜ້າກຽດຊັງນັ້ນ ຊຶ່ງເປັນໂສເພນີຂອງແຜ່ນດິນໂລກທັງໝົດ ຈະໄຫລລົງໃສ່ຫົວ ຂອງພວກເຂົາເອງ, ເພາະພວກເຂົາຈະເຮັດ ສົງຄາມລະຫວ່າງ ພວກເຂົາເອງ, ແລະ ດາບໃນມືຂອງພວກເຂົາ ເອງຈະຕົກໃສ່ ຫົວຂອງພວກເຂົາເອງ ແລະ ພວກເຂົາຈະມຶນເມົາດ້ວຍເລືອດ ຂອງພວກເຂົາເອງ.

And it meaneth that the time cometh that after all the house of Israel have been scattered and confounded, that the Lord God will raise up a mighty nation among the Gentiles, yea, even upon the face of this land; and by them shall our seed be scattered.

And after our seed is scattered the Lord God will proceed to do a marvelous work among the Gentiles, which shall be of great worth unto our seed; wherefore, it is likened unto their being nourished by the Gentiles and being carried in their arms and upon their shoulders.

And it shall also be of worth unto the Gentiles; and not only unto the Gentiles but unto all the house of Israel, unto the making known of the covenants of the Father of heaven unto Abraham, saying: In thy seed shall all the kindreds of the earth be blessed.

And I would, my brethren, that ye should know that all the kindreds of the earth cannot be blessed unless he shall make bare his arm in the eyes of the nations.

Wherefore, the Lord God will proceed to make bare his arm in the eyes of all the nations, in bringing about his covenants and his gospel unto those who are of the house of Israel.

Wherefore, he will bring them again out of captivity, and they shall be gathered together to the lands of their inheritance; and they shall be brought out of obscurity and out of darkness; and they shall know that the Lord is their Savior and their Redeemer, the Mighty One of Israel.

And the blood of that great and abominable church, which is the whore of all the earth, shall turn upon their own heads; for they shall war among themselves, and the sword of their own hands shall fall upon their own heads, and they shall be drunken with their own blood.

ແລະ ທຸກ ປະຊາຊາດທີ່ຈະ
ເ

And every nation which shall war against thee, O house of Israel, shall be turned one against another, and they shall fall into the pit which they digged to ensnare the people of the Lord. And all that fight against Zion shall be destroyed, and that great whore, who hath perverted the right ways of the Lord, yea, that great and abominable church, shall tumble to the dust and great shall be the fall of it.

For behold, saith the prophet, the time cometh speedily that Satan shall have no more power over the hearts of the children of men; for the day soon cometh that all the proud and they who do wickedly shall be as stubble; and the day cometh that they must be burned.

For the time soon cometh that the fulness of the wrath of God shall be poured out upon all the children of men; for he will not suffer that the wicked shall destroy the righteous.

Wherefore, he will preserve the righteous by his power, even if it so be that the fulness of his wrath must come, and the righteous be preserved, even unto the destruction of their enemies by fire. Wherefore, the righteous need not fear; for thus saith the prophet, they shall be saved, even if it so be as by fire.

Behold, my brethren, I say unto you, that these things must shortly come; yea, even blood, and fire, and vapor of smoke must come; and it must needs be upon the face of this earth; and it cometh unto men according to the flesh if it so be that they will harden their hearts against the Holy One of Israel.

For behold, the righteous shall not perish; for the time surely must come that all they who fight against Zion shall be cut off.

And the Lord will surely prepare a way for his people, unto the fulfilling of the words of Moses, which he spake, saying: A prophet shall the Lord your God raise up unto you, like unto me; him shall ye hear in all things whatsoever he shall say unto you. And it shall come to pass that all those who will not hear that prophet shall be cut off from among the people.

ຄ ແລະ ບັດນີ້ຂ້າພະເຈົ້ານີໄຟປະກາດກັບພວກເຈົ້າວ່າ ສາດສະດາຜູ້ທີ່ໂມເຊເວົ້າເຖິງຄື ພຣະຜູ້ບໍລິສຸດຂອງອິດສະຣາເອນ; ດັ່ງນັ້ນ, ພຣະອົງຈະກະທຳ ການພິພາກສາດ້ວຍຄວາມຊອບທຳ.

And now I, Nephi, declare unto you, that this prophet of whom Moses spake was the Holy One of Israel; wherefore, he shall execute judgment in righteousness.

ຄ ແລະ ຄົນຊອບທຳບໍ່ຕ້ອງຢ້ານກົວເພາະພວກເຂົາຄືຜູ້ທີ່ຈະບໍ່ຖືກທຳລາຍ, ແຕ່ຈະເປັນອານາຈັກຂອງມານ ຊຶ່ງມັນຈະຖືກສ້າງຂຶ້ນໃນບັນດາລູກຫລານມະນຸດ, ຊຶ່ງອານາຈັກນັ້ນຖືກສະຖາປະນາຂຶ້ນໃນບັນດາຜູ້ຄົນທີ່ຢູ່ໃນເນື້ອໜັງ—

And the righteous need not fear, for they are those who shall not be confounded. But it is the kingdom of the devil, which shall be built up among the children of men, which kingdom is established among them which are in the flesh—

ຄ ເພາະວັນເວລາຈະມາເຖິງຢ່າງວ່ອງໄວຄື ເມື່ອ ສາດສະໜາຈັກທຸກແຫ່ງທີ່ສ້າງຂຶ້ນເພື່ອຫາຜົນປະ�โຫຍດ, ແລະ ສາດສະໜາຈັກທີ່ສ້າງຂຶ້ນເພື່ອມີອຳນາດທາງເນື້ອໜັງ, ແລະ ສາດສະໜາຈັກທີ່ສ້າງຂຶ້ນເພື່ອເປັນທີ່ ນິຍົມໃນສາຍຕາຂອງໂລກ, ແລະ ສາດສະໜາຈັກທີ່ສະແຫວງຫາຄວາມໂລບມາກທາງເນື້ອໜັງ ແລະ ສິ່ງຂອງທາງໂລກ ແລະ ເຮັດຄວາມຊົ່ວຮ້າຍນາງໆປະການ; ແທ້ຈິງແລ້ວ, ໂດຍສະຫລຸບ, ພວກທີ່ເປັນອານາຈັກຂອງມານຄື ຜູ້ທີ່ຕ້ອງຢ້ານກົວຕົວສັ່ນ ແລະ ຫວັ່ນໄຫວ, ພວກເຂົາຈະຕ້ອງຖືກນຳລົງຕ່ຳຢູ່ພື້ນດິນ; ພວກເຂົາຈະຕ້ອງຖືກ ໄຫມ້ເຜົາຄືກັນກັບເຟືອງເຂົ້າ ແລະ ນີ້ຈະເປັນຕາມຄຳເວົ້າຂອງສາດສະດາ.

And the time speedily shall come that all churches which are built up to get gain, and all those who are built up to get power over the flesh, and those who are built up to become popular in the eyes of the world, and those who seek the lusts of the flesh and the things of the world, and to do all manner of iniquity; yea, in fine, all those who belong to the kingdom of the devil are they who need fear, and tremble, and quake; they are those who must be brought low in the dust; they are those who must be consumed as stubble; and this is according to the words of the prophet.

ຄ ແລະ ວັນເວລາຈະມາເຖິງຢ່າງວ່ອງໄວຄື ຄົນຊອບທຳຈະຕ້ອງຖືກພາຂຶ້ນໄປຄືກັນກັບ ລູກງົວໃນຄອກ ແລະ ພຣະຜູ້ບໍລິສຸດຂອງອິດສະຣາເອນຈະປົກຄອງດ້ວຍລິດເດດ, ດ້ວຍອຳນາດ ແລະ ລັດສະໝີພາບອັນຍິ່ງໃຫຍ່.

And the time cometh speedily that the righteous must be led up as calves of the stall, and the Holy One of Israel must reign in dominion, and might, and power, and great glory.

ຄ ແລະ ພຣະອົງຈະ ເຕົ້າໂຮມລູກຫລານຂອງພຣະອົງຈາກສີ່ສ່ວນຂອງແຜ່ນດິນໂລກ ແລະ ພຣະອົງຈະນັບຈຳນວນແກະຂອງພຣະອົງ, ແລະ ພວກເຂົາກໍຈະຮູ້ຈັກພຣະອົງ ແລະ ຈະມີ ແກະຄອກດຽວ ແລະ ມີ ຜູ້ລ້ຽງຜູ້ດຽວ, ແລະ ພຣະອົງຈະລ້ຽງແກະຂອງພຣະອົງ, ແລະ ໃນຕົວຂອງພຣະອົງ ພວກເຂົາຈະພົບທົ່ງຫຍ້າ.

And he gathereth his children from the four quarters of the earth; and he numbereth his sheep, and they know him; and there shall be one fold and one shepherd; and he shall feed his sheep, and in him they shall find pasture.

ຄ ແລະ ເພາະຄວາມຊອບທຳຂອງຜູ້ຄົນຂອງພຣະອົງ, ຊາຕານຈຶ່ງບໍ່ມີອຳນາດ; ດັ່ງນັ້ນ, ມັນຈຶ່ງຫລຸດອອກມາບໍ່ໄດ້ເປັນເວລາຫລາຍປີ ເພາະມັນບໍ່ມີອຳນາດເໜືອໃຈຂອງຜູ້ຄົນ; ເພາະພວກເຂົາຢູ່ໃນຄວາມຊອບທຳ ແລະ ພຣະຜູ້ບໍລິສຸດຂອງອິດສະຣາເອນ ປົກຄອງ.

And because of the righteousness of his people, Satan has no power; wherefore, he cannot be loosed for the space of many years; for he hath no power over the hearts of the people, for they dwell in righteousness, and the Holy One of Israel reigneth.

ຄ ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້ານີໄຟກ່າວກັບພວກເຈົ້າວ່າ ເລື່ອງທັງໝົດນີ້ຕ້ອງມາເຖິງຕາມທາງຝ່າຍເນື້ອໜັງ.

And now behold, I, Nephi, say unto you that all these things must come according to the flesh.

ຄ ແຕ່, ຈົ່ງເບິ່ງ, ທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງຈະຢູ່ຢ່າງປອດໄພໃນ ພຣະຜູ້ບໍລິສຸດຂອງອິດສະຣາເອນ ຖ້າຫາກເປັນໄປວ່າພວກເຂົາຈະ ກັບໃຈ.

But, behold, all nations, kindreds, tongues, and people shall dwell safely in the Holy One of Israel if it so be that they will repent.

໒໙ ແລະ ບັດນີ້ຂ້າພະເຈົ້າມີໄຟຂໍຈົບພຽງເທົ່ານີ້; ເພາະວ່າເຮົາບໍ່
ກ້າເວົ້າກ່ຽວກັບເລື່ອງເຫລົ່ານີ້ອີກຕໍ່ໄປ.

And now I, Nephi, make an end; for I durst not speak further as yet concerning these things.

໓໐ ດັ່ງນັ້ນ, ພວກອ້າຍຂອງເຮົາເອີຍ, ເຮົາຢາກໃຫ້ພວກເຈົ້າ
ພິຈາລະນາວ່າ ເລື່ອງຊຶ່ງມີຂຽນໄວ້ໃນ ແຜ່ນຈາລຶກທອງເຫລືອງ
ນີ້ເປັນຄວາມຈິງ; ແລະ ມັນໃຫ້ຖ້ອຍຄຳວ່າມະນຸດຕ້ອງເຊື່ອຟັງ
ພຣະບັນຍັດຂອງພຣະເຈົ້າ.

Wherefore, my brethren, I would that ye should consider that the things which have been written upon the plates of brass are true; and they testify that a man must be obedient to the commandments of God.

໓໑ ດັ່ງນັ້ນ, ພວກເຈົ້າບໍ່ຕ້ອງຄິດວ່າເຮົາກັບບິດາຂອງເຮົາເທົ່ານັ້ນ
ທີ່ເປັນຜູ້ໃຫ້ຖ້ອຍຄຳ ແລະ ສິດສອນສິ່ງເຫລົ່ານີ້. ດັ່ງນັ້ນ, ຖ້າ
ພວກເຈົ້າຈະເຊື່ອຟັງ ພຣະບັນຍັດ ແລະ ອົດທົນຈົນເຖິງທີ່ສຸດ,
ພວກເຈົ້າຈະລອດໃນວັນສຸດທ້າຍ. ແລະ ເປັນໄປດັ່ງນັ້ນ.
ອາແມນ.

Wherefore, ye need not suppose that I and my father are the only ones that have testified, and also taught them. Wherefore, if ye shall be obedient to the commandments, and endure to the end, ye shall be saved at the last day. And thus it is. Amen.

ໜັງສືນີໄຟສະບັບທີສອງ

ເລື່ອງລາວກ່ຽວກັບການມໍລະນະກຳຂອງລີໄຮ. ພວກອ້າຍຂອງນີໄຟກະບົດຕໍ່ເພີ່ນ. ພຣະຜູ້ເປັນເຈົ້າໄດ້ເຕືອນນີໄຟໃຫ້ອອກໄປໃນຖິ່ນແຫ້ງແລ້ງກັນດານ. ການເດີນທາງຂອງເພີ່ນໃນຖິ່ນແຫ້ງແລ້ງກັນດານ, ແລະ ອື່ນໆ.

ຄ ນີໄຟ ໑

໑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກຂ້າພະເຈົ້ານີໄຟ
ໄດ້ສິດສອນພວກອ້າຍຂອງຂ້າພະເຈົ້າແລ້ວ, ລີໄຮ ບິດາຂອງ
ພວກເຮົາໄດ້ເວົ້າກັບພວກເຂົາຫລາຍເລື່ອງອີກ ແລະ ໄດ້ຫວນ
ຄືນກັບພວກເຂົາວ່າ ພຣະຜູ້ເປັນເຈົ້າໄດ້ກະທຳສິ່ງທີ່ຍິ່ງໃຫຍ່
ພຽງໃດສຳລັບພວກເຂົາໃນການນຳພວກເຂົາອອກຈາກ
ແຜ່ນດິນເຢຣູຊາເລັມ.

ຄ ແລະ ເພີ່ນໄດ້ເວົ້າກັບພວກເຂົາເຖິງ ການກະບົດຂອງພວກ
ເຂົາເວລາຢູ່ໃນຜືນນ້ຳນັ້ນ ແລະ ພຣະເມດຕາຂອງພຣະເຈົ້າທີ່ໄວ້
ຊີວິດຂອງພວກເຂົາ, ເພື່ອພວກເຂົາຈະບໍ່ຖືກກືນລົງໄປໃນ
ທະເລ.

ມ ແລະ ເພີ່ນໄດ້ເວົ້າກັບພວກເຂົາອີກເຖິງແຜ່ນດິນແຫ່ງຄຳ
ສັນຍາ ຊຶ່ງພວກເຂົາໄດ້ຮັບ—ວ່າພຣະເຈົ້າມີຄວາມເມດຕາພຽງ
ໃດທີ່ໄດ້ເຕືອນພວກເຮົາໃຫ້ພວກເຮົາຫນີອອກຈາກແຜ່ນດິນ
ເຢຣູຊາເລັມ.

ຄ ເພາະຈົ່ງເບິ່ງ ເພີ່ນໄດ້ເວົ້າວ່າ ພໍ່ໄດ້ເຫັນ ພາບນິມິດພາບ
ໜຶ່ງ, ໃນພາບນັ້ນພໍ່ຮູ້ວ່າ ເຢຣູຊາເລັມໄດ້ຖືກທຳລາຍແລ້ວ ແລະ
ຖ້າພວກເຮົາຍັງຢູ່ໃນເມືອງເຢຣູຊາເລັມພວກເຮົາກໍຈະ ຕາຍຄື
ກັນ.

ຫ ແຕ່ເພີ່ນໄດ້ເວົ້າວ່າ ທັງທີ່ມີຄວາມທຸກ, ພວກເຮົາຍັງໄດ້ຮັບ
ແຜ່ນດິນແຫ່ງຄຳສັນຍາ ຊຶ່ງເປັນແຜ່ນດິນແຫ່ງໜຶ່ງທີ່ ປະເສີດ
ເລີດລ້ຳກວ່າແຜ່ນດິນອື່ນໃດທັງສິ້ນ; ເປັນແຜ່ນດິນທີ່ອົງພຣະ
ຜູ້ເປັນເຈົ້າໄດ້ເຮັດພັນທະສັນຍາກັບພໍ່ວ່າ ຈະເປັນແຜ່ນດິນມູນ
ມໍລະດົກຂອງລູກຫລານຂອງພໍ່. ແທ້ຈິງແລ້ວ, ພຣະຜູ້ເປັນເຈົ້າ
ໃຫ້ແຜ່ນດິນນີ້ເປັນ ພັນທະສັນຍາກັບພໍ່ ແລະ ກັບລູກຫລານ
ຂອງພໍ່ຕະຫລອດການ, ແລະ ກັບຄົນທັງໝົດທີ່ພຣະຫັດຂອງ
ພຣະຜູ້ເປັນເຈົ້າຈະນຳອອກຈາກປະເທດອື່ນໆອີກ.

ຊ ດັ່ງນັ້ນພໍ່, ລີໄຮ, ຈົ່ງທຳນາຍຕາມການກະທຳຂອງ
ພຣະວິນຍານ ຊຶ່ງຢູ່ໃນພໍ່ວ່າ ຈະ ບໍ່ມີຜູ້ໃດເຂົ້າມາຢູ່ໃນແຜ່ນດິນນີ້
ໄດ້ ນອກຈາກຈະເປັນພຣະຫັດຂອງພຣະຜູ້ເປັນເຈົ້າຊົງນຳເຂົາ
ມາເທົ່ານັ້ນ.

The Second Book of Nephi

An account of the death of Lehi. Nephi's brethren rebel against him. The Lord warns Nephi to depart into the wilderness. His journeyings in the wilderness, and so forth.

2 Nephi 1

And now it came to pass that after I, Nephi, had made an end of teaching my brethren, our father, Lehi, also spake many things unto them, and rehearsed unto them, how great things the Lord had done for them in bringing them out of the land of Jerusalem.

And he spake unto them concerning their rebellions upon the waters, and the mercies of God in sparing their lives, that they were not swallowed up in the sea.

And he also spake unto them concerning the land of promise, which they had obtained—how merciful the Lord had been in warning us that we should flee out of the land of Jerusalem.

For, behold, said he, I have seen a vision, in which I know that Jerusalem is destroyed; and had we remained in Jerusalem we should also have perished.

But, said he, notwithstanding our afflictions, we have obtained a land of promise, a land which is choice above all other lands; a land which the Lord God hath covenanted with me should be a land for the inheritance of my seed. Yea, the Lord hath covenanted this land unto me, and to my children forever, and also all those who should be led out of other countries by the hand of the Lord.

Wherefore, I, Lehi, prophesy according to the workings of the Spirit which is in me, that there shall none come into this land save they shall be brought by the hand of the Lord.

ກ ດັ່ງນັ້ນ ແຜ່ນດິນນີ້ຈຶ່ງຖືກຕັ້ງໄວ້ເພື່ອຄົນທີ່ພຣະອົງຈະ
ນຳມາ. ແລະ ຖ້າຫາກເປັນໄປວ່າພວກເຂົາຈະຮັບໃຊ້ພຣະອົງ
ຕາມພຣະບັນຍັດທີ່ປະທານໄວ້, ມັນຈະເປັນແຜ່ນດິນແຫ່ງ
ເສລີພາບສຳລັບພວກເຂົາ; ດັ່ງນັ້ນ, ພວກເຂົາຈະບໍ່ຖືກນຳລົງ
ໄປເປັນຊະເລີຍ; ຖ້າຫາກເປັນເຊັ່ນນັ້ນ, ກໍເປັນເພາະຄວາມ
ຊົ່ວຮ້າຍ ເພາະຖ້າຫາກຄວາມຊົ່ວຮ້າຍມີຢູ່ທົ່ວໄປ ແຜ່ນດິນນີ້ຈະ
ຖືກ ສາບແຊ່ງໃຫ້ແກ່ພວກເຂົາ, ແຕ່ສຳລັບຄົນຊອບທຳ ມັນຈະ
ເປັນພອນຕະຫລອດການ.

ຊ ແລະ ຈົ່ງເບິ່ງ, ມັນເປັນຄວາມສະຫລຽວສະຫລາດທີ່
ແຜ່ນດິນນີ້ໄດ້ຖືກຮັກສາໄວ້ ທີ່ບໍ່ໃຫ້ປະຊາຊາດອື່ນຮູ້ ເພາະຈົ່ງ
ເບິ່ງຫລາຍປະຊາຊາດຈະເຂົ້າມາຢຽບຍ່ຳແຜ່ນດິນນີ້ ຈົນວ່າມັນ
ບໍ່ມີບ່ອນເປັນມູນມໍລະດົກເລີຍ.

ດ ດັ່ງນັ້ນພໍ່, ລີໄຮ, ໄດ້ຮັບຄຳສັນຍາວ່າ ຕາບໃດຜູ້ທີ່ອົງພຣະຜູ້
ເປັນເຈົ້າຊົງນຳອອກຈາກແຜ່ນດິນເຢຣູຊາເລັມ ຈະຮັກສາ
ພຣະບັນຍັດຂອງພຣະອົງ, ພວກເຂົາຈະ ຮຸ່ງເຮືອງຢູ່ໃນ
ແຜ່ນດິນນີ້; ແລະ ພວກເຂົາຈະໄດ້ຮັບການປົກປັກຮັກສາໃຫ້
ພົ້ນຈາກປະຊາຊາດອື່ນໆທັງສິ້ນ, ເພື່ອພວກເຂົາຈະໄດ້
ແຜ່ນດິນນີ້ເປັນຂອງຕົນ ແລະ ຖ້າຫາກເປັນໄປວ່າ ພວກເຂົາຈະ
ຮັກສາພຣະບັນຍັດຂອງພຣະອົງ, ພວກເຂົາຈະໄດ້ຮັບພອນ
ຢູ່ໃນແຜ່ນດິນນີ້, ແລະ ຈະບໍ່ມີຜູ້ໃດບຽດບຽນພວກເຂົາ ຫລື ຈະ
ເອົາແຜ່ນດິນ ຊຶ່ງເປັນມູນມໍລະດົກຂອງພວກເຂົາໄປ ແລະ ພວກ
ເຂົາຈະຢູ່ຢ່າງປອດໄພຕະຫລອດໄປ.

ຊວ ແຕ່ຈົ່ງເບິ່ງ, ເມື່ອເວລານັ້ນມາເຖິງ ທີ່ພວກເຂົາຈະເສື່ອມໂຊມ
ຢູ່ໃນຄວາມບໍ່ເຊື່ອຖື, ຫລັງຈາກພວກເຂົາໄດ້ຮັບພອນອັນຍິ່ງ
ໃຫຍ່ຈາກພຣະຫັດຂອງພຣະຜູ້ເປັນເຈົ້າ—ໂດຍມີຄວາມຮູ້ເຖິງ
ການສ້າງໂລກ ແລະ ມະນຸດທັງປວງຮູ້ເຖິງວຽກງານອັນຍິ່ງ
ໃຫຍ່ ແລະ ໜ້າອັດສະຈັນຂອງພຣະຜູ້ເປັນເຈົ້າຕັ້ງແຕ່ການສ້າງ
ໂລກ, ມີອຳນາດທີ່ປະທານໃຫ້ພວກເຂົາເພື່ອເຮັດທຸກສິ່ງທຸກ
ຢ່າງດ້ວຍສັດທາ; ມີພຣະບັນຍັດທຸກປະການຕັ້ງແຕ່ຕົ້ນ, ແລະ
ໄດ້ຮັບການນຳມາໂດຍພຣະກະລຸນາທິຄຸນອັນຫາທີ່ປຽບບໍ່ໄດ້
ເຂົ້າມາສູ່ແຜ່ນດິນແຫ່ງຄຳສັນຍາອັນມີຄຸນຄ່ານີ້—ຈົ່ງເບິ່ງ, ພໍ່ຂໍ
ເວົ້າວ່າ ຖ້າຫາກວັນນັ້ນມາເຖິງທີ່ພວກເຂົາຈະປະຕິເສດພຣະຜູ້
ບໍລິສຸດຂອງອິດສະຣາເອນ, ພຣະເມຊີອາອົງແທ້ຈິງ, ຊຶ່ງເປັນ
ພຣະຜູ້ໄຖ່ຂອງພວກເຂົາ ແລະ ພຣະເຈົ້າຂອງພວກເຂົາ, ຈົ່ງ
ເບິ່ງ, ການພິພາກສາອັນທ່ຽງທຳຂອງພຣະອົງຈະຢູ່ເທິງພວກ
ເຂົາ.

ຊທ ແທ້ຈິງແລ້ວ, ພຣະອົງຈະຊົງນຳ ປະຊາຊາດອື່ນໆມາຫາ
ພວກເຂົາ, ແລະ ພຣະອົງຈະປະທານອຳນາດໃຫ້ແກ່ພວກນັ້ນ,
ແລະ ພຣະອົງຈະເອົາແຜ່ນດິນທີ່ເປັນຂອງພວກເຂົາໄປຈາກ
ພວກເຂົາ, ແລະ ພຣະອົງຈະເຮັດໃຫ້ພວກເຂົາ ກະຈັດກະຈາຍ
ໄປ ແລະ ຖືກລົງທັນ.

Wherefore, this land is consecrated unto him whom he shall bring. And if it so be that they shall serve him according to the commandments which he hath given, it shall be a land of liberty unto them; wherefore, they shall never be brought down into captivity; if so, it shall be because of iniquity; for if iniquity shall abound cursed shall be the land for their sakes, but unto the righteous it shall be blessed forever.

And behold, it is wisdom that this land should be kept as yet from the knowledge of other nations; for behold, many nations would overrun the land, that there would be no place for an inheritance.

Wherefore, I, Lehi, have obtained a promise, that inasmuch as those whom the Lord God shall bring out of the land of Jerusalem shall keep his commandments, they shall prosper upon the face of this land; and they shall be kept from all other nations, that they may possess this land unto themselves. And if it so be that they shall keep his commandments they shall be blessed upon the face of this land, and there shall be none to molest them, nor to take away the land of their inheritance; and they shall dwell safely forever.

But behold, when the time cometh that they shall dwindle in unbelief, after they have received so great blessings from the hand of the Lord—having a knowledge of the creation of the earth, and all men, knowing the great and marvelous works of the Lord from the creation of the world; having power given them to do all things by faith; having all the commandments from the beginning, and having been brought by his infinite goodness into this precious land of promise—behold, I say, if the day shall come that they will reject the Holy One of Israel, the true Messiah, their Redeemer and their God, behold, the judgments of him that is just shall rest upon them.

Yea, he will bring other nations unto them, and he will give unto them power, and he will take away from them the lands of their possessions, and he will cause them to be scattered and smitten.

Yea, as one generation passeth to another there shall be bloodsheds, and great visitations among them; wherefore, my sons, I would that ye would remember; yea, I would that ye would hearken unto my words.

O that ye would awake; awake from a deep sleep, yea, even from the sleep of hell, and shake off the awful chains by which ye are bound, which are the chains which bind the children of men, that they are carried away captive down to the eternal gulf of misery and woe.

Awake! and arise from the dust, and hear the words of a trembling parent, whose limbs ye must soon lay down in the cold and silent grave, from whence no traveler can return; a few more days and I go the way of all the earth.

But behold, the Lord hath redeemed my soul from hell; I have beheld his glory, and I am encircled about eternally in the arms of his love.

And I desire that ye should remember to observe the statutes and the judgments of the Lord; behold, this hath been the anxiety of my soul from the beginning.

My heart hath been weighed down with sorrow from time to time, for I have feared, lest for the hardness of your hearts the Lord your God should come out in the fulness of his wrath upon you, that ye be cut off and destroyed forever;

Or, that a cursing should come upon you for the space of many generations; and ye are visited by sword, and by famine, and are hated, and are led according to the will and captivity of the devil.

O my sons, that these things might not come upon you, but that ye might be a choice and a favored people of the Lord. But behold, his will be done; for his ways are righteousness forever.

And he hath said that: Inasmuch as ye shall keep my commandments ye shall prosper in the land; but inasmuch as ye will not keep my commandments ye shall be cut off from my presence.

ແທ້ຈິງແລ້ວ, ເມື່ອລຸ້ນໜຶ່ງຜ່ານໄປເຖິງອີກລຸ້ນໜຶ່ງ, ມັນຈະ
ເກີດມີ ການນອງເລືອດ ແລະ ຈະມີການມາຢ້ຽມຢາມຄັ້ງຍິ່ງ
ໃຫຍ່ໃນບັນດາພວກເຂົາ; ດັ່ງນັ້ນ, ລູກຂອງພໍ່, ພໍ່ຢາກໃຫ້ລູກ
ຈື່ຈຳໄວ້; ແທ້ຈິງແລ້ວ, ພໍ່ຢາກໃຫ້ລູກເຊື່ອຟັງຄຳເວົ້າຂອງພໍ່.

ໂອ້, ໃຫ້ລູກຕື່ນ; ຕື່ນຈາກການນອນຫລັບຢ່າງແຈບຈົມນັ້ນ
ເຖີດ, ແທ້ຈິງແລ້ວ, ເຖິງແມ່ນຈາກການນອນຫລັບຂອງ ນະລົກ
ແລະ ສັ່ນ ສາຍโส້ອັນເປັນຕາຢ້ານຊຶ່ງຜູກມັດລູກໃຫ້ຫລຸດອອກ
ຊຶ່ງເປັນສາຍโส້ທີ່ຜູກມັດລູກຫລານມະນຸດ, ຊຶ່ງນຳພວກເຂົາ
ລົງໄປເປັນຊະເລີຍໃນ ເຫວເລິກແຫ່ງຄວາມທຸກທໍລະມານ ແລະ
ວິບັດຊົ່ວນິລັນດອນ.

ຈົ່ງຕື່ນເຖີດ ແລະ ຈົ່ງລຸກຂຶ້ນຈາກພື້ນດິນ, ແລະ ຟັງຄຳເວົ້າ
ຂອງ ພໍ່ທີ່ກຳລັງສັ່ນຢູ່ ຊຶ່ງໃນບໍ່ຊ້າລູກຈະຕ້ອງເອົາແຂນຂາໄປ
ວາງໄວ້ໃນ ຫລຸມສົບອັນເຢັນ ແລະ ງຽບສະຫງັດ ຊຶ່ງຈາກບ່ອນ
ນັ້ນບໍ່ມີຜູ້ເດີນທາງຄົນໃດກັບມາໄດ້; ແລະ ອີກບໍ່ພໍເທົ່າໃດມື້ພໍ່ກໍ
ຈະໄປຕາມ ທາງຂອງມວນໂລກທັງປວງແລ້ວ.

ແຕ່ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ ໄຖ່ຈິດວິນຍານຂອງພໍ່ຈາກ
ນະລົກ; ພໍ່ໄດ້ເຫັນລັດສະໝີພາບຂອງພຣະອົງ ແລະ ພໍ່ໄດ້ຖືກ
ລ້ອມໄວ້ໃນອ້ອມ ພຣະພາຫາແຫ່ງ ຄວາມຮັກຂອງພຣະອົງຊົ່ວ
ນິລັນດອນ.

ແລະ ພໍ່ປາດຖະໜາຢາກໃຫ້ລູກຈື່ຈຳທີ່ຈະປະຕິບັດຕາມ ຂໍ້
ກຳນົດ ແລະ ການພິພາກສາຂອງພຣະຜູ້ເປັນເຈົ້າ; ຈົ່ງເບິ່ງ, ນີ້
ແມ່ນຄວາມຫ່ວງໃຍຂອງຈິດວິນຍານຂອງພໍ່ມາຕັ້ງແຕ່ຕົ້ນ.

ໃຈຂອງພໍ່ຖືກຖ່ວງລົງເພາະຄວາມເສົ້າສະຫລົດໃຈເປັນບາງ
ຄັ້ງ, ເພາະພໍ່ຢ້ານກົວຄວາມແຂງກະດ້າງເພາະໃຈຂອງລູກ,
ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງລູກຈະສະເດັດມາດ້ວຍ
ຄວາມສົມບູນແຫ່ງ ພຣະພິโລດໃຫ້ລູກ ຈົນວ່າລູກຖືກ ຕັດອອກ
ແລະ ຖືກທຳລາຍຕະຫລອດການ;

ຫລືວ່າ, ຄຳສາບແຊ່ງຈະມາເຖິງລູກເປັນເວລາ ຫລາຍລຸ້ນ
ຄົນ; ແລະ ລູກຈະຖືກຢ້ຽມຢາມດ້ວຍດາບ ແລະ ດ້ວຍຄວາມ
ອຶດຢາກ, ແລະ ຖືກກຽດຊັງ, ແລະ ນຳໄປຕາມຄວາມປະສົງ
ແລະ ເປັນຊະເລີຍຂອງ ມານ.

ໂອ້ ລູກຂອງພໍ່, ເພື່ອວ່າສິ່ງເຫລົ່ານີ້ຈະບໍ່ໄດ້ມາເຖິງລູກ, ແຕ່
ເພື່ອໃຫ້ລູກໄດ້ເປັນຜູ້ຖືກຄັດເລືອກ ແລະ ເປັນທີ່ຊົງ ໂປດປານ
ຂອງພຣະຜູ້ເປັນເຈົ້າ. ແຕ່ຈົ່ງເບິ່ງ, ພຣະປະສົງຂອງພຣະອົງຈະ
ສຳເລັດ; ເພາະ ທາງຂອງພຣະອົງເປັນທາງທີ່ຊອບທຳ
ຕະຫລອດໄປ.

ແລະ ພຣະອົງໄດ້ກ່າວວ່າ: ຕາບໃດທີ່ເຈົ້າຈະຮັກສາ ບັນຍັດ
ຂອງເຮົາ ເຈົ້າຈະ ຮຸ່ງເຮືອງຢູ່ໃນແຜ່ນດິນນັ້ນ; ແຕ່ຕາບໃດທີ່ເຈົ້າ
ຈະບໍ່ຮັກສາບັນຍັດຂອງເຮົາ ເຈົ້າຈະຖືກຕັດອອກຈາກທີ່ປະທັບ
ຂອງເຮົາ.

ຄ ແລະ ບັດນີ້, ເພື່ອຈິດວິນຍານຂອງພໍ່ຈະມີຄວາມປີຕິຍິນດີໃນ ລູກ, ແລະ ເພື່ອໃຈຂອງພໍ່ຈະຈາກໂລກນີ້ໄປດ້ວຍຄວາມຍິນດີ, ເພື່ອພໍ່ຈະບໍ່ຖືກນຳລົງສູ່ຫລຸມສົບດ້ວຍຄວາມໂສກເສົ້າ ແລະ ຄວາມເສົ້າສະຫລົດໃຈ, ສະນັ້ນຈົ່ງລຸກຂຶ້ນຈາກພື້ນດິນ, ລູກຂອງ ພໍ່, ແລະ ເປັນ ບຸລຸດ, ແລະ ຈົ່ງຕັ້ງໃຈ ເດັດດ່ຽວ ແລະ ໃຈດຽວ, ສາມັກຄີກັນໃນທຸກສິ່ງທຸກຢ່າງເພື່ອລູກຈະບໍ່ໄດ້ລົງໄປສູ່ຄວາມ ເປັນຊະເລີຍ;

ຄ ເພື່ອລູກຈະບໍ່ຖືກສາບແຊ່ງດ້ວຍຄຳສາບແຊ່ງຢ່າງສາຫັດ; ແລະ ເພື່ອລູກຈະບໍ່ກໍ່ຄວາມບໍ່ພໍພຣະໄທຂອງພຣະເຈົ້າຜູ້ ທ່ຽງທຳໃຫ້ເກີດກັບລູກຈົນໄປສູ່ຄວາມພິນາດອີກ; ແທ້ຈິງ ແລ້ວ, ຄວາມພິນາດນິລັນດອນຂອງທັງ ຈິດວິນຍານ ແລະ ຮ່າງກາຍ.

ຄ ຕື່ນເຖີດ, ລູກຂອງພໍ່; ຈົ່ງຖື ຍຸດທະພັນແຫ່ງຄວາມຊອບທຳ. ສັ່ນສາຍโส້ທີ່ຜູກມັດລູກໃຫ້ຫລຸດອອກ, ແລະ ອອກມາຈາກ ການປົດບັງ, ແລະ ຈົ່ງລຸກຂຶ້ນຈາກພື້ນດິນ.

ຄ ຈົ່ງຢ່າກະບົດຕໍ່ນ້ອງຊາຍຂອງລູກອີກຕໍ່ໄປ, ຊຶ່ງຄວາມຄິດ ເຫັນຂອງລາວປະເສີດ, ແລະ ເປັນຜູ້ຮັກສາພຣະບັນຍັດມາ ຕັ້ງແຕ່ເວລາທີ່ພວກເຮົາໄດ້ອອກຈາກເມືອງເຢຣູຊາເລັມ; ແລະ ເປັນເຄື່ອງມືໃນພຣະຫັດຂອງພຣະເຈົ້າໃນການນຳພວກເຮົາ ມາຫາແຜ່ນດິນແຫ່ງຄຳສັນຍາ, ເພາະຖ້າບໍ່ແມ່ນຍ້ອນລາວ ແລ້ວ, ພວກເຮົາກໍຕ້ອງຕາຍເພາະ ຄວາມຫິວຢູ່ໃນຖິ່ນ ແຫ້ງແລ້ງກັນດານ; ເຖິງປານນັ້ນ, ລູກຍັງພະຍາຍາມຈະ ເອົາ ຊີວິດຂອງລາວ; ແທ້ຈິງແລ້ວ, ລາວໄດ້ທົນຮັບເອົາຄວາມເສົ້າ ສະຫລົດໃຈຫລາຍເພາະລູກ.

ຄ ແລະ ພໍ່ຢ້ານກົວ ແລະ ຕົວສັ່ນຫລາຍເພາະລູກ, ຍ້ອນຢ້ານວ່າ ລູກຈະລຳບາກອີກ; ເພາະຈົ່ງເບິ່ງ, ລູກຫາວ່າລາວພະຍາຍາມ ຊອກຫາອຳນາດ ແລະ ສິດອຳນາດເໜືອກว่าລູກ; ແຕ່ພໍ່ຮູ້ວ່າ ລາວບໍ່ໄດ້ພະຍາຍາມຊອກຫາອຳນາດ ແລະ ສິດອຳນາດເໜືອ ກว่าລູກເລີຍ, ແຕ່ລາວພະຍາຍາມຊອກຫາລັດສະໝີພາບຂອງ ພຣະເຈົ້າ ແລະ ຄວາມຜາສຸກນິລັນດອນຂອງລູກເອງ.

ຄ ແລະ ລູກໄດ້ຈົ່ມເພາະລາວກົ້ງໄປກົ້ງມາກັບລູກ. ລູກເວົ້າວ່າ ລາວໄດ້ໃຊ້ ຄວາມຮຸນແຮງ; ລູກເວົ້າວ່າລາວໄດ້ຮ້າຍໃຫ້ລູກ; ແຕ່ ຈົ່ງເບິ່ງ, ຄວາມຮຸນແຮງຂອງລາວເປັນຄວາມຮຸນແຮງຂອງ ອຳນາດແຫ່ງພຣະຄຳຂອງພຣະເຈົ້າຊຶ່ງຢູ່ກັບລາວ; ແລະ ສິ່ງທີ່ ລູກເອີ້ນວ່າໃຈຮ້າຍນັ້ນຄືຄວາມຈິງຕາມທີ່ຢູ່ໃນພຣະເຈົ້າ ຊຶ່ງລາວ ບັງຄັບບໍ່ໄດ້, ຊຶ່ງລາວໄດ້ສະແດງໃຫ້ປະຈັກຢ່າງອາດຫານເຖິງ ຄວາມຊົ່ວຮ້າຍຂອງລູກ.

And now that my soul might have joy in you, and that my heart might leave this world with gladness because of you, that I might not be brought down with grief and sorrow to the grave, arise from the dust, my sons, and be men, and be determined in one mind and in one heart, united in all things, that ye may not come down into captivity;

That ye may not be cursed with a sore cursing; and also, that ye may not incur the displeasure of a just God upon you, unto the destruction, yea, the eternal destruction of both soul and body.

Awake, my sons; put on the armor of righteousness. Shake off the chains with which ye are bound, and come forth out of obscurity, and arise from the dust.

Rebel no more against your brother, whose views have been glorious, and who hath kept the commandments from the time that we left Jerusalem; and who hath been an instrument in the hands of God, in bringing us forth into the land of promise; for were it not for him, we must have perished with hunger in the wilderness; nevertheless, ye sought to take away his life; yea, and he hath suffered much sorrow because of you.

And I exceedingly fear and tremble because of you, lest he shall suffer again; for behold, ye have accused him that he sought power and authority over you; but I know that he hath not sought for power nor authority over you, but he hath sought the glory of God, and your own eternal welfare.

And ye have murmured because he hath been plain unto you. Ye say that he hath used sharpness; ye say that he hath been angry with you; but behold, his sharpness was the sharpness of the power of the word of God, which was in him; and that which ye call anger was the truth, according to that which is in God, which he could not restrain, manifesting boldly concerning your iniquities.

ຄ໗ ແລະ ມັນຈົ່ງຈຳເປັນທີ່ ອຳນາດຂອງພຣະເຈົ້າຕ້ອງຢູ່ກັບລາວ, ເຖິງແມ່ນກັບຄຳສັ່ງຂອງລາວທີ່ລູກຈະຕ້ອງເຊື່ອຟັງ. ແຕ່ຈົ່ງ ເບິ່ງ, ບໍ່ແມ່ນລາວ, ແຕ່ແມ່ນ ພຣະວິນຍານຂອງພຣະຜູ້ເປັນເຈົ້າ ຊຶ່ງຢູ່ກັບລາວທີ່ ເປີດປາກຂອງລາວໃຫ້ເວົ້າ ຊຶ່ງລາວປິດບໍ່ໄດ້.

And it must needs be that the power of God must be with him, even unto his commanding you that ye must obey. But behold, it was not he, but it was the Spirit of the Lord which was in him, which opened his mouth to utterance that he could not shut it.

ຄ໘ ແລະ ບັດນີ້ລູກຂອງພໍ່, ເລມັນ, ແລະ ເລມູເອນ ແລະ ແຊມກໍຄື ກັນ, ແລະ ລູກຂອງພໍ່ຜູ້ເປັນລູກຂອງອິດຊະມາເອນກໍເໝືອນ ກັນ, ຈົ່ງເບິ່ງ, ຖ້າຫາກລູກຈະເຊື່ອຟັງສຽງຂອງນີໄຟ ລູກຈະບໍ່ ຕາຍ. ແລະ ຖ້າຫາກລູກເຊື່ອຟັງຄວາມລາວ ພໍ່ຈະໃຫ້ ພອນແກ່ ລູກ, ແທ້ຈິງແລ້ວ, ແມ່ນພອນປະການທຳອິດຂອງພໍ່.

And now my son, Laman, and also Lemuel and Sam, and also my sons who are the sons of Ishmael, behold, if ye will hearken unto the voice of Nephi ye shall not perish. And if ye will hearken unto him I leave unto you a blessing, yea, even my first blessing.

But if ye will not hearken unto him I take away my first blessing, yea, even my blessing, and it shall rest upon him.

And now, Zoram, I speak unto you: Behold, thou art the servant of Laban; nevertheless, thou hast been brought out of the land of Jerusalem, and I know that thou art a true friend unto my son, Nephi, forever.

Wherefore, because thou hast been faithful thy seed shall be blessed with his seed, that they dwell in prosperity long upon the face of this land; and nothing, save it shall be iniquity among them, shall harm or disturb their prosperity upon the face of this land forever.

Wherefore, if ye shall keep the commandments of the Lord, the Lord hath consecrated this land for the security of thy seed with the seed of my son.

ຄ໙ ແລະ ບັດນີ້, ໂຊຣຳ, ຂ້າພະເຈົ້າຢາກເວົ້າກັບເຈົ້າວ່າ: ຈົ່ງເບິ່ງ, ເຈົ້າເປັນ ຄົນໃຊ້ຂອງລາບານ; ເຖິງຢ່າງໃດກໍຕາມ, ເຈົ້າຍັງຖືກ ພາອອກມາຈາກແຜ່ນດິນເຢຣູຊາເລັມ, ແລະ ຂ້າພະເຈົ້າຮູ້ວ່າ ເຈົ້າເປັນເພື່ອນທີ່ແທ້ຈິງຂອງນີໄຟ, ລູກຂອງຂ້າພະເຈົ້າ ຕະຫລອດໄປ.

And now, Zoram, I speak unto you: Behold, thou art the servant of Laban; nevertheless, thou hast been brought out of the land of Jerusalem, and I know that thou art a true friend unto my son, Nephi, forever.

ມ໐ ດັ່ງນັ້ນ, ເພາະວ່າເຈົ້າເປັນຄົນຊື່ສັດຕະຫລອດມາ ລູກຫລານ ຂອງເຈົ້າຈະໄດ້ຮັບພອນ ພ້ອມກັບລູກຫລານຂອງລາວ ພວກ ເຂົາຈະຢູ່ດ້ວຍຄວາມຮຸ່ງເຮືອງຍາວນານໃນແຜ່ນດິນນີ້ ແລະ ບໍ່ມີ ສິ່ງໃດນອກຈາກຈະເປັນຄວາມຊົ່ວຮ້າຍໃນບັນດາພວກເຂົາທີ່ຈະ ເປັນອັນຕະລາຍ ຫລື ລົບກວນຄວາມຮຸ່ງເຮືອງຂອງພວກເຂົາ ໃນແຜ່ນດິນນີ້ຕະຫລອດໄປ.

Wherefore, because thou hast been faithful thy seed shall be blessed with his seed, that they dwell in prosperity long upon the face of this land; and nothing, save it shall be iniquity among them, shall harm or disturb their prosperity upon the face of this land forever.

ມ໑ ດັ່ງນັ້ນ, ຖ້າຫາກເຈົ້າຈະຮັກສາພຣະບັນຍັດຂອງພຣະຜູ້ເປັນ ເຈົ້າ, ພຣະຜູ້ເປັນເຈົ້າຈະຕັ້ງແຜ່ນດິນນີ້ໄວ້ ເພື່ອຄວາມໝັ້ນຄົງ ຂອງລູກຫລານຂອງເຈົ້າກັບລູກຫລານຂອງລູກຂ້າພະເຈົ້າ.

Wherefore, if ye shall keep the commandments of the Lord, the Lord hath consecrated this land for the security of thy seed with the seed of my son.

ເນີໄຟ ເນ

ນ ແລະ ບັດນີ້ຢາໂຄບພໍ່ຂໍເວົ້າກັບລູກວ່າ: ລູກເປັນ ລູກຄົນທຳອິດ ຂອງພໍ່ໃນວັນແຫ່ງຄວາມທຸກຂອງພໍ່ຢູ່ໃນຖິ່ນແຫ້ງແລ້ງ ກັນດານ. ແລະ ຈົ່ງເບິ່ງ, ໃນໄວເດັກຂອງລູກ, ລູກໄດ້ຮັບຄວາມ ທຸກຍາກລຳບາກ ແລະ ຄວາມເສົ້າສະຫລົດໃຈມາຫລາຍ ເພາະ ຄວາມຫຍາບຄາຍຂອງພວກອ້າຍຂອງລູກ.

ບ ເຖິງຢ່າງໃດກໍຕາມຢາໂຄບລູກຄົນທຳອິດຂອງພໍ່ໃນຖິ່ນ ແຫ້ງແລ້ງກັນດານ, ລູກຍັງຮູ້ເຖິງຄວາມຍິ່ງໃຫຍ່ຂອງພຣະເຈົ້າ; ແລະ ພຣະອົງໄດ້ຕັ້ງຄວາມທຸກຂອງລູກໄວ້ເພື່ອຜົນປະ�โຫຍດ ຂອງລູກ.

ມ ດັ່ງນັ້ນ, ຈິດວິນຍານຂອງລູກຈະໄດ້ຮັບພອນ, ແລະ ລູກຈະຢູ່ ຢ່າງປອດໄພກັບນີໄຟອ້າຍຂອງລູກ, ແລະ ລູກຈະໃຊ້ວັນເວລາ ຂອງລູກໄປໃນການຮັບໃຊ້ພຣະເຈົ້າຂອງລູກ. ດັ່ງນັ້ນ, ພໍ່ຮູ້ວ່າ ລູກຖືກໄຖ່ແລ້ວ ເພາະຄວາມຊອບທຳຂອງພຣະຜູ້ໄຖ່ຂອງລູກ, ເພາະລູກເຫັນແລ້ວວ່າ ໃນຄວາມສົມບູນແຫ່ງເວລາ ພຣະອົງຈະ ສະເດັດມາ ເພື່ອນຳຄວາມລອດມາໃຫ້ມະນຸດ.

ຫ ແລະ ລູກໄດ້ ເຫັນລັດສະໝີພາບຂອງພຣະອົງແລ້ວໃນໄວ ເດັກຂອງລູກ; ດັ່ງນັ້ນ, ລູກໄດ້ຮັບພອນຄືກັນກັບຄົນທີ່ພຣະອົງ ຈະປະຕິບັດຕໍ່ໃນເນື້ອໜັງ; ເພາະພຣະວິນຍານເປັນເໝືອນກັນ ເຊັ່ນ ມື້ວານນີ້, ມື້ນີ້ ແລະ ຕະຫລອດການ. ແລະ ເສັ້ນທາງຖືກ ຕຽມໄວ້ຕັ້ງແຕ່ການຕົກຂອງມະນຸດ, ແລະ ຄວາມລອດເປັນຂອງ ໃຫ້ ລ້າໆ.

ຫ ແລະ ມະນຸດໄດ້ຮັບການແນະນຳຢ່າງພຽງພໍຈົນ ຮູ້ຈັກ ຄວາມດີຈາກຄວາມຊົ່ວ. ແລະ ມີກົດໃຫ້ມະນຸດ ແລະ ໂດຍທາງ ກົດບໍ່ມີເນື້ອໜັງອັນໃດທີ່ ຖືກຕ້ອງ; ຫລື ໂດຍທາງກົດມະນຸດ ຍ່ອມຖືກຕັດ ອອກ. ແທ້ຈິງແລ້ວ, ໂດຍກົດທາງຝ່າຍໂລກ ພວກ ເຂົາໄດ້ຖືກຕັດອອກ ແລະ ໂດຍກົດທາງຝ່າຍວິນຍານ ພວກເຂົາ ຈົ່ງຕາຍຈາກສິ່ງທີ່ດີ ແລະ ກາຍມາເປັນຄົນເສົ້າສະຫລົດໃຈ ຕະຫລອດໄປ.

ຫ ດັ່ງນັ້ນ, ການໄຖ່ຈຶ່ງມາເຖິງໂດຍຜ່ານທາງ ພຣະເມຊີອາຜູ້ ບໍລິສຸດ; ເພາະພຣະອົງເຕັມໄປດ້ວຍ ພຣະຄຸນ ແລະ ຄວາມຈິງ.

ກ ຈົ່ງເບິ່ງ, ພຣະອົງໄດ້ຖວາຍພຣະອົງເອງໃຫ້ເປັນ ເຄື່ອງບູຊາ ເພື່ອບາບ, ເພື່ອຕອບທີ່ສຸດຂອງກົດໃຫ້ຄົນທັງປວງຜູ້ມີໃຈທີ່ ຊອກຊ້ຳ ແລະ ມີວິນຍານທີ່ສຳນຶກຜິດ; ແລະ ຈະຕອບ ທີ່ສຸດ ຂອງກົດໃຫ້ໃຜອີກບໍ່ໄດ້.

2 Nephi 2

And now, Jacob, I speak unto you: Thou art my first-born in the days of my tribulation in the wilderness. And behold, in thy childhood thou hast suffered afflictions and much sorrow, because of the rudeness of thy brethren.

Nevertheless, Jacob, my firstborn in the wilderness, thou knowest the greatness of God; and he shall consecrate thine afflictions for thy gain.

Wherefore, thy soul shall be blessed, and thou shalt dwell safely with thy brother, Nephi; and thy days shall be spent in the service of thy God. Wherefore, I know that thou art redeemed, because of the righteousness of thy Redeemer; for thou hast beheld that in the fulness of time he cometh to bring salvation unto men.

And thou hast beheld in thy youth his glory; wherefore, thou art blessed even as they unto whom he shall minister in the flesh; for the Spirit is the same, yesterday, today, and forever. And the way is prepared from the fall of man, and salvation is free.

And men are instructed sufficiently that they know good from evil. And the law is given unto men. And by the law no flesh is justified; or, by the law men are cut off. Yea, by the temporal law they were cut off; and also, by the spiritual law they perish from that which is good, and become miserable forever.

Wherefore, redemption cometh in and through the Holy Messiah; for he is full of grace and truth.

Behold, he offereth himself a sacrifice for sin, to answer the ends of the law, unto all those who have a broken heart and a contrite spirit; and unto none else can the ends of the law be answered.

໘ ດັ່ງນັ້ນ, ມັນສຳຄັນພຽງໃດທີ່ຈະເຮັດໃຫ້ສິ່ງເຫລົ່ານີ້ເປັນທີ່ຮູ້ຈັກແກ່ຜູ້ອາໄສຂອງແຜ່ນດິນໂລກ ເພື່ອພວກເຂົາຈະໄດ້ຮູ້ວ່າບໍ່ມີເນື້ອໜັງໃດຈະຢູ່ໃນທີ່ປະທັບຂອງພຣະເຈົ້າໄດ້ ນອກຈາກເປັນຜ່ານທາງພຣະຄຸນຄວາມດີ, ແລະ ພຣະເມດຕາ, ແລະ ພຣະຄຸນຂອງພຣະເມຊີອາຜູ້ບໍລິສຸດ ຜູ້ໄດ້ມອບຊີວິດຂອງພຣະອົງຕາມທາງແຫ່ງເນື້ອໜັງ ແລະ ຮັບເອົາມັນອີກໂດຍອຳນາດຂອງພຣະວິນຍານ, ເພື່ອພຣະອົງຈະໄດ້ເຮັດໃຫ້ເກີດການຟື້ນຄືນຊີວິດຂອງຄົນຕາຍ ໂດຍເປັນຜູ້ທຳອິດທີ່ຈະລຸກຂຶ້ນມາ.

Wherefore, how great the importance to make these things known unto the inhabitants of the earth, that they may know that there is no flesh that can dwell in the presence of God, save it be through the merits, and mercy, and grace of the Holy Messiah, who layeth down his life according to the flesh, and taketh it again by the power of the Spirit, that he may bring to pass the resurrection of the dead, being the first that should rise.

໙ ດັ່ງນັ້ນ, ພຣະອົງຈຶ່ງເປັນຜົນທຳອິດໃຫ້ແກ່ພຣະເຈົ້າ ເພາະພຣະອົງຈະ ວິງວອນແທນລູກຫລານມະນຸດທັງປວງ; ແລະ ຄົນທີ່ເຊື່ອໃນພຣະອົງເທົ່ານັ້ນຈະລອດ.

Wherefore, he is the firstfruits unto God, inasmuch as he shall make intercession for all the children of men; and they that believe in him shall be saved.

໑໐ ແລະ ເປັນເພາະການ ວິງວອນແທນທຸກໆຄົນ, ມະນຸດທັງປວງຍ່ອມມາຫາພຣະເຈົ້າ; ດັ່ງນັ້ນ, ພວກເຂົາຢືນຢູ່ໃນທີ່ປະທັບຂອງພຣະອົງ ເພື່ອຮັບ ການພິພາກສາຂອງພຣະອົງຕາມຄວາມຈິງ ແລະ ຄວາມບໍລິສຸດ ຊຶ່ງມີຢູ່ໃນພຣະອົງ. ດັ່ງນັ້ນ, ທີ່ສຸດຂອງກົດ ຊຶ່ງພຣະຜູ້ບໍລິສຸດປະທານໄວ້ໃຫ້ເພື່ອການລົງໂທດ ຊຶ່ງມີຕິດຢູ່ນັ້ນ, ຊຶ່ງໂທດທີ່ມີຕິດຢູ່ນັ້ນ ເປັນສິ່ງກົງກັນຂ້າມກັບສິ່ງທີ່ເປັນຄວາມສຸກ ຊຶ່ງມີຕິດຢູ່ເພື່ອຕອບທີ່ສຸດຂອງ ການຊົດໃຊ້—

๘๑ ແລະ ມານຈະເຮັດໃຫ້ຄົນອື່ນໆ ສະຫງົບ ແລະ ກ່ອມພວກນັ້ນ ໄປໃນຄວາມໝັ້ນຄົງທີ່ເຕັມໄປດ້ວຍການມະລົມຈົນວ່າພວກນັ້ນ ຈະເວົ້າວ່າ: ທຸກຢ່າງດີໃນຊີໂອນ; ແທ້ຈິງແລ້ວ, ຊີໂອນຮຸ່ງເຮືອງ ໃນທຸກດ້ານ—ແລະ ມານກ່ອມຈິດວິນຍານຂອງພວກເຂົາດັ່ງນີ້, ແລະ ພາພວກເຂົາລົງໄປຫານະລົກຢ່າງລະມັດລະວັງ.

๘๒ ແລະ ຈົ່ງເບິ່ງ, ມານຍົກຍໍຄົນອື່ນໆໄປ, ແລະ ບອກว่าบ่ມີ ນະ ລົກ; ແລະ ມານກ່າວກັບພວກນີ້ວ່າ: ເຮົາບໍ່ແມ່ນມານ ເພາະວ່າ ບໍ່ມີມານເລີຍ—ແລະ ມັນຈະສົ່ມໃສ່ໃນຫູຂອງພວກນີ້ເຊັ່ນນັ້ນ, ຈົນວ່າມັນຈັບພວກນີ້ໄວ້ ດ້ວຍ ໂສ້ອັນເປັນຕາຢ້ານຂອງມັນ, ຊຶ່ງ ຈາກນັ້ນຍ່ອມບໍ່ມີການປົດປ່ອຍ.

๘๓ ແທ້ຈິງແລ້ວ, ພວກເຂົາຈະຖືກຈັບໄວ້ດ້ວຍຄວາມຕາຍ ແລະ ນະລົກ; ແລະ ຄວາມຕາຍ, ແລະ ນະລົກ, ແລະ ມານ, ແລະ ທຸກຢ່າງທີ່ຖືກຍຶດໄວ້ນັ້ນຕ້ອງຢືນຢູ່ຕໍ່ໜ້າພຣະທີ່ນັ່ງຂອງພຣະເຈົ້າ, ແລະ ຮັບ ການພິພາກສາຕາມວຽກງານຂອງພວກເຂົາ, ຊຶ່ງຫລັງຈາກນັ້ນພວກເຂົາຕ້ອງໄປຫາບ່ອນທີ່ຕຽມໄວ້ໃຫ້ພວກເຂົາ, ເຖິງແມ່ນໄປສູ່ ທະເລໄຟ ແລະ ມາດ, ຊຶ່ງເປັນຄວາມທໍລະມານທີ່ບໍ່ມີວັນສິ້ນສຸດ.

Yea, they are grasped with death, and hell; and death, and hell, and the devil, and all that have been seized therewith must stand before the throne of God, and be judged according to their works, from whence they must go into the place prepared for them, even a lake of fire and brimstone, which is endless torment.

๘๔ ສະນັ້ນ ວິບັດແກ່ຜູ້ຊຶ່ງຢູ່ຢ່າງບໍ່ທຸກຮ້ອນໃນຊີໂອນ!

Therefore, wo be unto him that is at ease in Zion!

๘๕ ວິບັດແກ່ຜູ້ທີ່ຮ້ອງອອກມາວ່າ: ທຸກຢ່າງດີ!

Wo be unto him that crieth: All is well!

๘๖ ແທ້ຈິງແລ້ວ, ວິບັດແກ່ຜູ້ທີ່ ເຊື່ອຟັງກົດເກນຂອງມະນຸດ ແລະ ປະຕິເສດອຳນາດຂອງພຣະເຈົ້າ, ແລະ ຂອງປະທານແຫ່ງພຣະວິນຍານບໍລິສຸດ!

Yea, wo be unto him that hearkeneth unto the precepts of men, and denieth the power of God, and the gift of the Holy Ghost!

๘๗ ແທ້ຈິງແລ້ວ, ວິບັດແກ່ຜູ້ທີ່ກ່າວว່າ: ເຮົາໄດ້ຮັບແລ້ວ ແລະ ບໍ່ຕ້ອງການອີກ!

Yea, wo be unto him that saith: We have received, and we need no more!

๘๘ ແລະ ໂດຍສະຫລຸບ, ວິບັດແກ່ຄົນທັງຫລາຍທີ່ຕົວສັ່ນ ແລະ ໃຈຮ້າຍຍ້ອນว່າຄວາມຈິງຂອງພຣະເຈົ້າ! ເພາະຈົ່ງເບິ່ງ, ຄົນທີ່ຖືກສ້າງຂຶ້ນເທິງ ດານຫີນຍ່ອມຮັບມັນດ້ວຍຄວາມດີ; ແລະ ຄົນທີ່ຖືກສ້າງຂຶ້ນໃນຮາກຖານທີ່ເປັນດິນຊາຍ ຍ່ອມຕົວສັ່ນຢ້ານว່າຄົນຈະຕົກ.

And in fine, wo unto all those who tremble, and are angry because of the truth of God! For behold, he that is built upon the rock receiveth it with gladness; and he that is built upon a sandy foundation trembleth lest he shall fall.

๘๙ ວິບັດແກ່ຜູ້ທີ່ກ່າວว່າ: ເຮົາໄດ້ຮັບພຣະຄຳຂອງພຣະເຈົ້າແລ້ວ, ແລະ ເຮົາ ບໍ່ຕ້ອງການພຣະຄຳຂອງພຣະເຈົ້າ ອີກ, ເພາະว່າເຮົາມີພໍແລ້ວ!

Wo be unto him that shall say: We have received the word of God, and we need no more of the word of God, for we have enough!

๙๐ ເພາະຈົ່ງເບິ່ງ, ອົງພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ເຮົາຈະໃຫ້ແກ່ລູກຫລານມະນຸດເປັນບັນທັດ, ເປັນ ຂໍ້ເລັກໆໜ້ອຍໆ, ນີ້ໜ້ອຍໜຶ່ງ ແລະ ນັ້ນໜ້ອຍໜຶ່ງ; ແລະ ຜູ້ທີ່ເຊື່ອຟັງກົດເກນຂອງເຮົາ ແລະ ງ່ຽງຫູຟັງຄຳແນະນຳຂອງເຮົາ ຍ່ອມເປັນສຸກ, ເພາະว່າເຂົາຈະຮຽນຮູ້ເຖິງ ປັນຍາ; ເມື່ອເຂົາ ຮັບໄວ້ ເຮົາຈະໃຫ້ເຂົາ ອີກ; ແລະ ສຳລັບຜູ້ທີ່ຈະກ່າວว່າ ເຮົາມີພໍແລ້ວ, ມັນຈະຖືກເອົາໄປຈາກເຂົາເຖິງແມ່ນສິ່ງທີ່ເຂົາມີຢູ່ກໍຈະຖືກເອົາໄປ.

For behold, thus saith the Lord God: I will give unto the children of men line upon line, precept upon precept, here a little and there a little; and blessed are those who hearken unto my precepts, and lend an ear unto my counsel, for they shall learn wisdom; for unto him that receiveth I will give more; and from them that shall say, We have enough, from them shall be taken away even that which they have.

๙๑ ຜູ້ທີ່ ໄວ້ເນື້ອເຊື່ອໃຈໃນມະນຸດ ຫລື ເຮັດໃຫ້ເນື້ອໜັງເປັນແຂນຂອງເຂົາ, ຫລື ຈະເຊື່ອຟັງກົດເກນຂອງມະນຸດ, ຍ່ອມຖືກສາບແຊ່ງ, ນອກຈາກຈະມີກົດເກນໃຫ້ເຂົາໂດຍອຳນາດຂອງພຣະວິນຍານບໍລິສຸດ.

Cursed is he that putteth his trust in man, or maketh flesh his arm, or shall hearken unto the precepts of men, save their precepts shall be given by the power of the Holy Ghost.

๙๒ ອົງພຣະຜູ້ເປັນເຈົ້າຈອມโยหาได้ກ່າວไว้ว่า, ວິບັດແກ່ຄົນຕ່າງຊາດ! ເພາະว່າເຖິງແມ່ນເຮົາຈະຍື່ນແຂນຂອງເຮົາອອກໄປ ໃຫ້ພວກເຂົາທຸກໆວັນ, ພວກເຂົາຍັງປະຕິເສດເຮົາ; ອົງພຣະຜູ້ເປັນເຈົ້າໄດ້ກ່າວ, ເຖິງຢ່າງໃດກໍຕາມ, ເຮົາກໍຈະເມດຕາພວກເຂົາ ຖ້າຫາກພວກເຂົາຈະກັບໃຈ ແລະ ມາຫາເຮົາ; ເພາະว່າ ແຂນຂອງເຮົາຍື່ນອອກໄປຕະຫລອດທັງວັນ, ອົງພຣະຜູ້ເປັນເຈົ້າ, ຈອມโยหาได้ກ່າວ.

Wo be unto the Gentiles, saith the Lord God of Hosts! For notwithstanding I shall lengthen out mine arm unto them from day to day, they will deny me; nevertheless, I will be merciful unto them, saith the Lord God, if they will repent and come unto me; for mine arm is lengthened out all the day long, saith the Lord God of Hosts.

๒ ນີໄຟ ๒๙

๑ ແຕ່ຈົ່ງເບິ່ງ ໃນມື້ນັ້ນຈະມີຄົນເປັນຈຳນວນຫລວງຫລາຍ—ເວລາເຮົາຈະເລີ່ມທຳ ງານອັດສະຈັນໃນບັນດາພວກເຂົາ, ເພື່ອເຮົາຈະຄິດເຖິງ ພັນທະສັນຍາຂອງເຮົາ ຊຶ່ງເຮັດໄວ້ກັບລູກຫລານມະນຸດ, ເພື່ອເຮົາຈະລົງມືອີກເປັນຄັ້ງ ທີສອງທີ່ຈະນຳ ຜູ້ຄົນຂອງເຮົາ ຊຶ່ງເປັນເຊື້ອສາຍອິດສະຣາເອນກັບຄືນມາ;

๒ ແລະ ເພື່ອເຮົາຈະລະນຶກເຖິງສັນຍາທີ່ເຮົາໄດ້ເຮັດໄວ້ກັບເຈົ້ານີ ໄຟ ແລະ ກັບບິດາຂອງເຈົ້າອີກວ່າ ເຮົາຈະລະນຶກເຖິງລູກຫລານ ຂອງເຈົ້າ ແລະ ວ່າ ຄຳເວົ້າຂອງລູກຫລານຂອງເຈົ້າຈະອອກຈາກ ປາກຂອງເຮົາໄປຫາລູກຫລານຂອງເຈົ້າ; ແລະ ຄຳເວົ້າຂອງເຮົາ ຈະ ຮຽກຮ້ອງອອກໄປຫາທີ່ສຸດຂອງແຜ່ນດິນໂລກ, ເພື່ອເປັນ ຫລັກສັນຍານໃຫ້ແກ່ຜູ້ຄົນຂອງເຮົາ, ຊຶ່ງເປັນເຊື້ອສາຍ ອິດສະຣາເອນ.

๓ ເພາະຄຳເວົ້າຂອງເຮົາຈະສົ່ງສຽງອອກໄປ—ຄົນຕ່າງຊາດ ສ່ວນຫລາຍຈະເວົ້າວ່າ: ພຣະຄຣິສຕະທຳຄຳພີ! ພຣະຄຣິສຕະ ທຳຄຳພີ! ເຮົາມີພຣະຄຣິສຕະທຳຄຳພີຢູ່ແລ້ວ, ແລະ ຈະມີພຣະ ຄຣິສຕະທຳຄຳພີເຫລັ້ມອື່ນອີກບໍ່ໄດ້.

๔ ແຕ່ອົງພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ໂອ້ ຄົນໂງ່, ເຂົາຈະມີ ພຣະຄຣິສຕະທຳຄຳພີ; ແລະ ມັນໄດ້ອອກມາຈາກ ຊາວຢິວ, ຜູ້ຄົນແຫ່ງພັນທະສັນຍາໃນສະໄໝບູຮານຂອງເຮົາ. ແລະ ພວກເຂົາຕອບແທນບຸນຄຸນຊາວຢິວຢ່າງໃດແດ່ສຳລັບ ພຣະ ຄຣິສຕະທຳຄຳພີ ຊຶ່ງພວກເຂົາໄດ້ຮັບຈາກພວກນັ້ນ? ແທ້ຈິງ ແລ້ວ, ຄົນຕ່າງຊາດໝາຍເຖິງອັນໃດ? ພວກເຂົາໄດ້ນຶກເຖິງ ຄວາມຍາກລຳບາກ ແລະ ການທຳງານ, ແລະ ການເຈັບປວດ ຂອງຊາວຢິວ ແລະ ຄວາມພາກພຽນຂອງພວກນັ້ນທີ່ມີຕໍ່ເຮົາ ໃນການນຳຄວາມລອດມາສູ່ຄົນຕ່າງຊາດຫລືບໍ່?

๕ ໂອ້ ເຈົ້າຄົນຕ່າງຊາດ, ເຈົ້າຄິດເຖິງຊາວຢິວ, ຊຶ່ງເປັນຜູ້ຄົນ ແຫ່ງພັນທະສັນຍາໃນສະໄໝບູຮານຂອງເຮົາຫລືບໍ່? ບໍ່ເຄີຍ ເລີຍ; ແຕ່ເຈົ້າສາບແຊ່ງພວກເຂົາ, ແລະ ຊັງພວກເຂົາ, ແລະ ບໍ່ ພະຍາຍາມນຳພວກເຂົາກັບຄືນມາ. ແຕ່ຈົ່ງເບິ່ງ, ເຮົາຈະເອົາສິ່ງ ເຫລົ່ານີ້ທັງໝົດກັບມາໃສ່ເທິງຫົວຂອງເຈົ້າເອງ; ເພາະເຮົາ ພຣະຜູ້ເປັນເຈົ້າ ບໍ່ລືມຜູ້ຄົນຂອງເຮົາເລີຍ.

๖ ເຈົ້າຄົນໂງ່ທີ່ຈະເວົ້າວ່າ: ພຣະຄຣິສຕະທຳຄຳພີ, ເຮົາມີພຣະ ຄຣິສຕະທຳຄຳພີຢູ່ແລ້ວ, ແລະ ເຮົາບໍ່ຕ້ອງການພຣະຄຣິສຕະ ທຳຄຳພີເຫລັ້ມອື່ນອີກ. ເຈົ້າຈະໄດ້ຮັບພຣະຄຣິສຕະທຳຄຳພີບໍ ນອກຈາກໂດຍຊາວຢິວ?

2 Nephi 29

But behold, there shall be many—at that day when I shall proceed to do a marvelous work among them, that I may remember my covenants which I have made unto the children of men, that I may set my hand again the second time to recover my people, which are of the house of Israel;

And also, that I may remember the promises which I have made unto thee, Nephi, and also unto thy father, that I would remember your seed; and that the words of your seed should proceed forth out of my mouth unto your seed; and my words shall hiss forth unto the ends of the earth, for a standard unto my people, which are of the house of Israel;

And because my words shall hiss forth—many of the Gentiles shall say: A Bible! A Bible! We have got a Bible, and there cannot be any more Bible.

But thus saith the Lord God: O fools, they shall have a Bible; and it shall proceed forth from the Jews, mine ancient covenant people. And what thank they the Jews for the Bible which they receive from them? Yea, what do the Gentiles mean? Do they remember the travails, and the labors, and the pains of the Jews, and their diligence unto me, in bringing forth salvation unto the Gentiles?

O ye Gentiles, have ye remembered the Jews, mine ancient covenant people? Nay; but ye have cursed them, and have hated them, and have not sought to recover them. But behold, I will return all these things upon your own heads; for I the Lord have not forgotten my people.

Thou fool, that shall say: A Bible, we have got a Bible, and we need no more Bible. Have ye obtained a Bible save it were by the Jews?

ᾗ ເຈົ້າບໍ່ຮູ້ບໍ່ວ່າ ມີປະຊາຊາດຫລາຍກວ່າໜຶ່ງຊາດ? ເຈົ້າບໍ່ຮູ້ບໍ່ວ່າ ເຮົາພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ, ຜູ້ ສ້າງ ມະນຸດທັງປວງ, ແລະວ່າເຮົານຶກເຖິງຄົນທີ່ຢູ່ໃນ ເກາະໃນ ທະເລ; ແລະ ວ່າເຮົາປົກຄອງຢູ່ໃນຟ້າສະຫວັນເບື້ອງເທິງ; ແລະ ໃນແຜ່ນດິນໂລກເບື້ອງລຸ່ມ; ແລະ ເຮົານຳຄວາມເວົ້າຂອງເຮົາ ອອກມາຫາລູກຫລານມະນຸດ, ແທ້ຈິງແລ້ວ, ແມ່ນສູ່ປະຊາຊາດ ທັງໝົດຂອງແຜ່ນດິນໂລກ?

ᾘ ດັ່ງນັ້ນ ເຈົ້າຈົ່ມວ່າ, ຍ້ອນວ່າເຈົ້າຈະໄດ້ຮັບຄຳເວົ້າຂອງເຮົາ ຫລາຍຂຶ້ນບໍ? ເຈົ້າບໍ່ຮູ້ບໍ່ວ່າ ປະຈັກພະຍານຂອງ ສອງ ປະຊາຊາດເປັນ ພະຍານຕໍ່ເຈົ້າວ່າເຮົາຄືພຣະເຈົ້າ, ວ່າເຮົານຶກ ເຖິງປະຊາຊາດໜຶ່ງເໝືອນກັນກັບອີກປະຊາຊາດໜຶ່ງ? ດັ່ງນັ້ນ, ເຮົາເວົ້າຄຳດຽວກັບປະຊາຊາດໜຶ່ງຄືກັນກັບເວົ້າກັບ ປະຊາຊາດອື່ນ. ແລະ ເມື່ອສອງ ປະຊາຊາດຈະຮ່ວມກັນ ປະຈັກ ພະຍານທັງສອງປະຊາຊາດຈະຮ່ວມກັນອີກ.

ᾙ ແລະ ເຮົາກະທຳເຊັ່ນນີ້ ເພື່ອຈະໄດ້ພິສູດຕໍ່ຄົນຢ່າງ ຫລວງຫລາຍວ່າ ເຮົາເປັນ ເໝືອນກັນເຊັ່ນມື້ວານນີ້, ມື້ນີ້, ແລະ ຕະຫລອດການ; ແລະ ວ່າເຮົາເວົ້າອອກໄປຕາມຄວາມພໍໃຈຂອງ ເຮົາ. ແລະ ເພາະວ່າເຮົາເວົ້າ ຄຳໜຶ່ງແລ້ວເຈົ້າບໍ່ຈຳເປັນຕ້ອງຄິດ ວ່າເຮົາເວົ້າອີກຄຳໜຶ່ງບໍ່ໄດ້; ເພາະວຽກງານຂອງເຮົາຍັງບໍ່ທັນ ຈົບ ແລະ ມັນຈະຍັງບໍ່ຈົບຈົນເຖິງທີ່ສຸດຂອງມະນຸດ, ທັງຈາກ ເວລານີ້ເປັນຕົ້ນໄປ ແລະ ຕະຫລອດການ.

ᾚ ດັ່ງນັ້ນ, ເພາະເຈົ້າມີພຣະຄຣິສຕະທຳຄຳພີແລ້ວ ແລະ ເຈົ້າກໍ ບໍ່ຈຳເປັນຕ້ອງຄິດວ່າມັນມີ ຄຳເວົ້າທັງໝົດຂອງເຮົາຢູ່ໃນນັ້ນ; ທັງເຈົ້າບໍ່ຈຳເປັນຈະຕ້ອງຄິດວ່າ ເຮົາບໍ່ໄດ້ສັ່ງໃຫ້ບັນທຶກຕື່ມອີກ.

ᾛ ເພາະເຮົາສັ່ງມະນຸດ ທັງປວງ, ທັງໃນທາງຕາເວັນອອກ, ແລະ ທາງຕາເວັນຕົກ, ທັງໃນທາງເໜືອ, ແລະ ທາງໃຕ້, ແລະ ໃນເກາະໃນທະເລ, ວ່າພວກເຂົາຈະ ບັນທຶກຄຳເວົ້າ ຊຶ່ງເຮົາເວົ້າ ກັບພວກເຂົາ; ເພາະຈາກ ໜັງສື ຊຶ່ງຈະມີບັນທຶກໄວ້ນັ້ນ ເຮົາຈະ ພິພາກສາໂລກ, ພິພາກສາທຸກໆຄົນຕາມວຽກງານຂອງພວກ ເຂົາ, ຕາມເລື່ອງທີ່ໄດ້ບັນທຶກໄວ້.

ᾜ ເພາະຈົ່ງເບິ່ງ, ເຮົາຈະເວົ້າກັບ ຊາວຢິວ ແລະ ພວກເຂົາຈະ ບັນທຶກມັນໄວ້; ແລະ ເຮົາຈະເວົ້າກັບຊາວນີໄຟ ແລະ ພວກເຂົາ ຈະ ບັນທຶກມັນໄວ້; ແລະ ເຮົາຈະເວົ້າກັບເຜົ່າອື່ນໆຂອງເຊື້ອສາຍ ອິດສະຣາເອນອີກ, ຊຶ່ງເຮົາໄດ້ນຳອອກໄປແລ້ວ ແລະ ພວກເຂົາ ຈະບັນທຶກມັນໄວ້; ແລະ ເຮົາຈະເວົ້າກັບປະຊາຊາດ ທັງໝົດ ຂອງແຜ່ນດິນໂລກ ແລະ ເຂົາຈະບັນທຶກມັນໄວ້.

Know ye not that there are more nations than one? Know ye not that I, the Lord your God, have created all men, and that I remember those who are upon the isles of the sea; and that I rule in the heavens above and in the earth beneath; and I bring forth my word unto the children of men, yea, even upon all the nations of the earth?

Wherefore murmur ye, because that ye shall receive more of my word? Know ye not that the testimony of two nations is a witness unto you that I am God, that I remember one nation like unto another? Wherefore, I speak the same words unto one nation like unto another. And when the two nations shall run together the testimony of the two nations shall run together also.

And I do this that I may prove unto many that I am the same yesterday, today, and forever; and that I speak forth my words according to mine own pleasure. And because that I have spoken one word ye need not suppose that I cannot speak another; for my work is not yet finished; neither shall it be until the end of man, neither from that time henceforth and forever.

Wherefore, because that ye have a Bible ye need not suppose that it contains all my words; neither need ye suppose that I have not caused more to be written.

For I command all men, both in the east and in the west, and in the north, and in the south, and in the islands of the sea, that they shall write the words which I speak unto them; for out of the books which shall be written I will judge the world, every man according to their works, according to that which is written.

For behold, I shall speak unto the Jews and they shall write it; and I shall also speak unto the Nephites and they shall write it; and I shall also speak unto the other tribes of the house of Israel, which I have led away, and they shall write it; and I shall also speak unto all nations of the earth and they shall write it.

ແລະ ເຫດການຈະບັງເກີດຂຶ້ນຄື ຊາວຢິວຈະມີຄຳເວົ້າຂອງ ຊາວນີໄຟ, ແລະ ຊາວນີໄຟຈະມີຄຳເວົ້າຂອງຊາວຢິວ; ແລະ ຊາວ ນີໄຟກັບຊາວຢິວຈະມີຄຳເວົ້າຂອງ ເຜົ່າອິດສະຣາເອນທີ່ ສູນຫາຍໄປ; ແລະ ເຜົ່າອິດສະຣາເອນທີ່ສູນຫາຍໄປຈະມີຄຳເວົ້າ ຂອງຊາວນີໄຟກັບຊາວຢິວ.

And it shall come to pass that the Jews shall have the words of the Nephites, and the Nephites shall have the words of the Jews; and the Nephites and the Jews shall have the words of the lost tribes of Israel; and the lost tribes of Israel shall have the words of the Nephites and the Jews.

ແລະ ເຫດການຈະບັງເກີດຂຶ້ນຄື ຜູ້ຄົນຂອງເຮົາ ຊຶ່ງເປັນຄົນ ຂອງ ເຊື້ອສາຍອິດສະຣາເອນ ຈະຖືກເຕົ້າໂຮມກັບຄືນບ້ານສູ່ ແຜ່ນດິນແຫ່ງຊັບສົມບັດຂອງພວກເຂົາ; ແລະ ຄຳເວົ້າຂອງເຮົາ ຈະຖືກເຕົ້າໂຮມໄວ້ ເປັນຄຳດຽວກັນ. ແລະ ເຮົາຈະສະແດງແກ່ ຄົນທີ່ຕໍ່ສູ້ກັບຄຳເວົ້າຂອງເຮົາ, ແລະ ກັບຜູ້ຄົນຂອງເຮົາຜູ້ເປັນ ເຊື້ອສາຍອິດສະຣາເອນວ່າ ເຮົາຄືພຣະເຈົ້າ ແລະ ວ່າເຮົາໃຫ້ ພັນທະສັນຍາໄວ້ກັບອັບຣາຮາມ ວ່າເຮົາຈະລະນຶກເຖິງ ລູກ ຫລານຂອງລາວ ຕະຫລອດໄປ.

And it shall come to pass that my people, which are of the house of Israel, shall be gathered home unto the lands of their possessions; and my word also shall be gathered in one. And I will show unto them that fight against my word and against my people, who are of the house of Israel, that I am God, and that I covenanted with Abraham that I would remember his seed forever.

ເດ ນີໄຟ ມ0

1 ແລະ ບັດນີ້ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າຈະເວົ້າກັບພວກທ່ານ; ເພາະວ່າ ຂ້າພະເຈົ້ານີໄຟຈະບໍ່ຍອມໃຫ້ພວກທ່ານຄິດວ່າ ພວກທ່ານຊອບທຳຫລາຍກວ່າຄົນຕ່າງຊາດ. ເພາະຈົ່ງເບິ່ງ, ຖ້າຫາກພວກທ່ານບໍ່ຮັກສາພຣະບັນຍັດຂອງພຣະເຈົ້າ ພວກທ່ານກໍຈະຕາຍຄືກັນໝົດ; ຍ້ອນວ່າຂໍ້ຄວາມທີ່ເວົ້າໄວ້ ພວກທ່ານກໍຈຳຕ້ອງຄິດວ່າຄົນຕ່າງຊາດຖືກທຳລາຍໃຫ້ສິ້ນໄປ.

2 ເພາະຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບພວກທ່ານວ່າ ຄົນຕ່າງຊາດຜູ້ໃດທີ່ຈະກັບໃຈຍ່ອມເປັນຜູ້ຄົນແຫ່ງ ພັນທະສັນຍາຂອງພຣະຜູ້ເປັນເຈົ້າ; ແລະ ຊາວຢິວຜູ້ໃດທີ່ຈະບໍ່ກັບໃຈຈະຖືກປະຖິ້ມ ເພາະວ່າພຣະຜູ້ເປັນເຈົ້າບໍ່ມີພັນທະສັນຍາກັບຜູ້ໃດນອກຈາກກັບຄົນທີ່ ກັບໃຈ ແລະ ເຊື່ອຖືໃນພຣະບຸດຂອງພຣະອົງ ຜູ້ເປັນພຣະຜູ້ບໍລິສຸດຂອງອິດສະຣາເອນ.

3 ແລະ ບັດນີ້, ຂ້າພະເຈົ້າຈະທຳນາຍເພີ່ມເຕີມອີກກ່ຽວກັບຊາວຢິວກັບຄົນຕ່າງຊາດ. ເພາະຫລັງຈາກໜັງສືທີ່ຂ້າພະເຈົ້າເວົ້າເຖິງຈະປະກົດອອກມາ, ແລະ ຖືກບັນທຶກໄວ້ໃຫ້ຄົນຕ່າງຊາດ, ແລະ ຖືກຜະນึกไว้ให้ພຣະຜູ້ເປັນເຈົ້າອີກ, ແລະ ກໍຈະມີຄົນຈຳນວນຫລວງຫລາຍທີ່ຈະ ເຊື່ອຖືຂໍ້ຄວາມທີ່ຂຽນໄວ້; ແລະ ພວກເຂົາຈະນຳເອົາມັນອອກໄປຫາພວກທີ່ເຫລືອຢູ່ຂອງລູກຫລານຂອງພວກເຮົາ.

4 ແລະ ເວລານັ້ນຜູ້ທີ່ເຫລືອຢູ່ຂອງລູກຫລານຂອງພວກເຮົາ ຈະໄດ້ຮູ້ຈັກກ່ຽວກັບພວກເຮົາວ່າ ພວກເຮົາມາຈາກເຢຣູຊາເລັມ ແບບໃດ, ແລະ ວ່າພວກເຂົາເປັນຜູ້ສືບຕະກຸນຂອງຊາວຢິວ.

5 ແລະ ພຣະກິດຕິຄຸນຂອງພຣະເຢຊູຄຣິດຈະຖືກປະກາດໃນ ບັນດາ ພວກເຂົາ; ດັ່ງນັ້ນ, ພວກເຂົາຈະຖືກນຳກັບມາຫາ ຄວາມຮູ້ເລື່ອງບັນພະບຸລຸດຂອງພວກເຂົາ ແລະ ຄວາມຮູ້ເລື່ອງ ພຣະເຢຊູຄຣິດອີກ, ຊຶ່ງມີຢູ່ໃນບັນດາບັນພະບຸລຸດຂອງພວກ ເຂົາ.

6 ແລະ ເມື່ອນັ້ນ ພວກເຂົາຈະປິຕິຍິນດີເພາະພວກເຂົາຈະຮູ້ຈັກ ວ່າ ມັນເປັນພອນໃຫ້ພວກເຂົາຈາກພຣະຫັດຂອງພຣະເຈົ້າ; ແລະ ສະເກັດແຫ່ງຄວາມມືດຂອງພວກເຂົາຈະເລີ່ມຕົກຈາກຕາ ຂອງພວກເຂົາ; ແລະ ບໍ່ເທົ່າໃດລຸ້ນຄົນຈະຜ່ານໄປໃນບັນດາ ພວກເຂົາ, ຈົນວ່າພວກເຂົາຈະເປັນຄົນຂາວ ແລະ ໜ້າຊົມ.

7 ແລະ ເຫດການຈະບັງເກີດຂຶ້ນຄື ຊາວຢິວຊຶ່ງກະຈັດກະຈາຍ ໄປຈະ ເລີ່ມເຊື່ອໃນພຣະຄຣິດອີກ; ແລະ ພວກເຂົາຈະເລີ່ມທ້ອນ ໂຮມກັນເຂົ້າມາໃນຜືນແຜ່ນດິນ; ແລະ ຫລາຍຕໍ່ຫລາຍຄົນທີ່ຈະ ເຊື່ອໃນພຣະຄຣິດ ກໍຈະກັບເປັນຜູ້ຄົນທີ່ໜ້າຊົມຄືກັນ.

2 Nephi 30

And now behold, my beloved brethren, I would speak unto you; for I, Nephi, would not suffer that ye should suppose that ye are more righteous than the Gentiles shall be. For behold, except ye shall keep the commandments of God ye shall all likewise perish; and because of the words which have been spoken ye need not suppose that the Gentiles are utterly destroyed.

For behold, I say unto you that as many of the Gentiles as will repent are the covenant people of the Lord; and as many of the Jews as will not repent shall be cast off; for the Lord covenanteth with none save it be with them that repent and believe in his Son, who is the Holy One of Israel.

And now, I would prophesy somewhat more concerning the Jews and the Gentiles. For after the book of which I have spoken shall come forth, and be written unto the Gentiles, and sealed up again unto the Lord, there shall be many which shall believe the words which are written; and they shall carry them forth unto the remnant of our seed.

And then shall the remnant of our seed know concerning us, how that we came out from Jerusalem, and that they are descendants of the Jews.

And the gospel of Jesus Christ shall be declared among them; wherefore, they shall be restored unto the knowledge of their fathers, and also to the knowledge of Jesus Christ, which was had among their fathers.

And then shall they rejoice; for they shall know that it is a blessing unto them from the hand of God; and their scales of darkness shall begin to fall from their eyes; and many generations shall not pass away among them, save they shall be a pure and a delightsome people.

And it shall come to pass that the Jews which are scattered also shall begin to believe in Christ; and they shall begin to gather in upon the face of the land; and as many as shall believe in Christ shall also become a delightsome people.

ຄ ແລະ ເຫດການຈະບັງເກີດຂຶ້ນຄື ອົງພຣະຜູ້ເປັນເຈົ້າ ຈະເລີ່ມ ທຳງານຂອງພຣະອົງໃນບັນດາທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ, ເພື່ອຈະນຳການຟື້ນຟູ ມາຫາຜູ້ຄົນຂອງພຣະອົງໃນແຜ່ນດິນໂລກ.

ງ ແລະ ອົງພຣະຜູ້ເປັນເຈົ້າຈະ ພິພາກສາຄົນຍາກຈົນດ້ວຍ ຄວາມຊອບທຳ, ແລະ ຕຳນິດ້ວຍຄວາມທ່ຽງທຳ ເພື່ອ ຄົນໃຈ ອ່ອນໂยນຂອງແຜ່ນດິນໂລກ. ແລະ ແຜ່ນດິນໂລກຈະຖືກ ລົງໂທດຕາມຄຳສັ່ງຂອງພຣະອົງ; ແລະ ຄົນຊົ່ວກໍ ຈະຕາຍດ້ວຍ ຄຳພິພາກສາຂອງພຣະອົງ.

ຈ ເພາະວ່າ ເວລາມາເຖິງຢ່າງວ່ອງໄວ ຊຶ່ງອົງພຣະຜູ້ເປັນເຈົ້າ ຈະເຮັດໃຫ້ເກີດ ຄວາມແບ່ງແຍກຢ່າງໃຫຍ່ຫລວງໃນບັນດາ ຜູ້ຄົນ, ແລະ ພຣະອົງຈະທຳລາຍຄົນຊົ່ວ; ແລະ ພຣະອົງຈະ ໄວ້ ຊີວິດຜູ້ຄົນຂອງພຣະອົງ, ແທ້ຈິງແລ້ວ, ຖ້າຫາກຈະເປັນໄປວ່າ ພຣະອົງຈະຕ້ອງ ທຳລາຍຄົນຊົ່ວດ້ວຍໄຟ.

ສ ແລະ ຄວາມຊອບທຳຈະເປັນຜ້າຄຽນອຸທອນຂອງພຣະອົງ, ແລະ ຄວາມຊື່ສັດຈະເປັນຜ້າຄຽນບັ້ນອຸທອນຂອງພຣະອົງ.

ສ ແລະ ຈາກນັ້ນໝາປ່າຈະຢູ່ກັບລູກແກະ, ເສືອດາວຈະນອນຢູ່ ນຳລູກແບ້, ແລະ ລູກງົວກັບສິງໜຸ່ມ, ແລະ ລູກສັດອ້ວນຈະຢູ່ນຳ ກັນ; ແລະ ເດັກນ້ອຍຄົນໜຶ່ງຈະນຳພວກມັນໄປ.

ສ ແລະ ງົວແມ່ກັບໝີຈະກິນນຳກັນ; ລູກຂອງພວກມັນກໍຈະ ນອນຢູ່ນຳກັນ; ແລະ ສິງຈະກິນເຟືອງເຂົ້າຄືກັນກັບງົວເຖິກ.

ສ ແລະ ເດັກນ້ອຍກິນນົມຈະຫລິ້ນໃນຮູຂອງງູພິດ, ແລະ ເດັກນ້ອຍທີ່ເຊົານົມ ຈະວາງມືຂອງເຂົາໃນກົ່ງງູຮ້າຍ.

ສ ພວກມັນຈະບໍ່ທຳຮ້າຍ ຫລື ທຳລາຍໄປທົ່ວພູເຂົາອັນສັກສິດ ຂອງເຮົາ ເພາະແຜ່ນດິນໂລກຈະເຕັມໄປດ້ວຍຄວາມຮູ້ກ່ຽວກັບ ພຣະຜູ້ເປັນເຈົ້າເໝືອນດັ່ງທະເລທີ່ເຕັມໄປດ້ວຍນ້ຳ.

ສ ດັ່ງນັ້ນ, ເລື່ອງຂອງປະຊາຊາດ ທັງໝົດຈະເປັນທີ່ຮູ້ຈັກກັນ; ແທ້ຈິງແລ້ວ, ທຸກຢ່າງຈະເປັນທີ່ ຮູ້ຈັກແກ່ລູກຫລານມະນຸດ.

ສ ບໍ່ມີຫຍັງທີ່ຈະເປັນຄວາມລັບເພາະມັນຈະຖືກ ເປີດເຜີຍ; ຈະ ບໍ່ມີງານແຫ່ງຄວາມມືດເພາະມັນຈະຖືກສະແດງໃຫ້ປະຈັກໃນ ຄວາມສະຫວ່າງ; ແລະ ບໍ່ມີສິ່ງໃດຈະຖືກຜະນຶກໄວ້ໃນແຜ່ນດິນ ໂລກເພາະມັນຈະຖືກປ່ອຍອອກມາ.

ສ ດັ່ງນັ້ນ, ທຸກຢ່າງທີ່ຖືກເປີດເຜີຍແກ່ລູກຫລານມະນຸດຈະຖືກ ເປີດເຜີຍໃນນັ້ນ; ແລະ ຊາຕານຈະບໍ່ມີອຳນາດເໜືອໃຈຂອງລູກ ຫລານມະນຸດ ອີກເປັນເວລາດົນນານ. ແລະ ບັດນີ້, ພີ່ນ້ອງ ທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າຂໍຈົບຂໍ້ຄວາມຂອງ ຂ້າພະເຈົ້າໄວ້ເທົ່ານີ້.

And it shall come to pass that the Lord God shall commence his work among all nations, kindreds, tongues, and people, to bring about the restoration of his people upon the earth.

And with righteousness shall the Lord God judge the poor, and reprove with equity for the meek of the earth. And he shall smite the earth with the rod of his mouth; and with the breath of his lips shall he slay the wicked.

For the time speedily cometh that the Lord God shall cause a great division among the people, and the wicked will he destroy; and he will spare his people, yea, even if it so be that he must destroy the wicked by fire.

And righteousness shall be the girdle of his loins, and faithfulness the girdle of his reins.

And then shall the wolf dwell with the lamb; and the leopard shall lie down with the kid, and the calf, and the young lion, and the fatling, together; and a little child shall lead them.

And the cow and the bear shall feed; their young ones shall lie down together; and the lion shall eat straw like the ox.

And the sucking child shall play on the hole of the asp, and the weaned child shall put his hand on the cockatrice's den.

They shall not hurt nor destroy in all my holy mountain; for the earth shall be full of the knowledge of the Lord as the waters cover the sea.

Wherefore, the things of all nations shall be made known; yea, all things shall be made known unto the children of men.

There is nothing which is secret save it shall be revealed; there is no work of darkness save it shall be made manifest in the light; and there is nothing which is sealed upon the earth save it shall be loosed.

Wherefore, all things which have been revealed unto the children of men shall at that day be revealed; and Satan shall have power over the hearts of the children of men no more, for a long time. And now, my beloved brethren, I make an end of my sayings.

ຂ ນີໄຟ ມ.ຈ

2 Nephi 31

ຈ ແລະ ບັດນີ້ຂ້າພະເຈົ້ານີໄຟຈົບ ການທຳນາຍຂອງຂ້າພະເຈົ້າທີ່ ໃຫ້ກັບພວກທ່ານ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ. ແລະ ຂ້າພະເຈົ້າໄດ້ບັນທຶກທັງໝົດໄວ້ບໍ່ໄດ້ນອກຈາກສອງສາມເລື່ອງ ທີ່ຂ້າພະເຈົ້າຮູ້ວ່າຕ້ອງເກີດຂຶ້ນຢ່າງແນ່ນອນ; ທັງຂ້າພະເຈົ້າ ບັນທຶກໄວ້ບໍ່ໄດ້ນອກຈາກຄຳເວົ້າສອງສາມຄຳຂອງຢາໂຄບ ນ້ອງຊາຍຂອງຂ້າພະເຈົ້າ.

And now I, Nephi, make an end of my prophesying unto you, my beloved brethren. And I cannot write but a few things, which I know must surely come to pass; neither can I write but a few of the words of my brother Jacob.

ສ ດັ່ງນັ້ນ, ເລື່ອງທີ່ຂ້າພະເຈົ້າໄດ້ບັນທຶກໄວ້ກໍພຽງພໍສຳລັບ ຂ້າພະເຈົ້າ, ນອກຈາກຈະເປັນຄຳເວົ້າສອງສາມຄຳ ຊຶ່ງ ຂ້າພະເຈົ້າຕ້ອງເວົ້າກ່ຽວກັບ ຄຳສອນຂອງພຣະຄຣິດ; ດັ່ງນັ້ນ, ຂ້າພະເຈົ້າຈະເວົ້າກັບພວກທ່ານຢ່າງແຈ່ມແຈ້ງຕາມຄວາມແຈ່ມ ແຈ້ງຂອງການທຳນາຍຂອງຂ້າພະເຈົ້າ.

Wherefore, the things which I have written sufficeth me, save it be a few words which I must speak concerning the doctrine of Christ; wherefore, I shall speak unto you plainly, according to the plainness of my prophesying.

ຫ ເພາະຈິດວິນຍານຂອງຂ້າພະເຈົ້າເບີກບານໃນຄວາມແຈ່ມ ແຈ້ງ; ເພາະຕາມວິທີນີ້ ອົງພຣະຜູ້ເປັນເຈົ້າທຳງານຢູ່ໃນບັນດາ ລູກຫລານມະນຸດ. ເພາະອົງພຣະຜູ້ເປັນເຈົ້າປະທານ ຄວາມ ສະຫວ່າງໃຫ້ແກ່ຄວາມເຂົ້າໃຈ; ເພາະພຣະອົງຮັບສັ່ງກັບມະນຸດ ຕາມ ພາສາຂອງພວກເຂົາ ຊຶ່ງໄປສູ່ຄວາມເຂົ້າໃຈຂອງພວກ ເຂົາ.

For my soul delighteth in plainness; for after this manner doth the Lord God work among the children of men. For the Lord God giveth light unto the understanding; for he speaketh unto men according to their language, unto their understanding.

ຄ ດັ່ງນັ້ນ, ຂ້າພະເຈົ້າຢາກໃຫ້ພວກທ່ານຈົດຈຳว່າ ຂ້າພະເຈົ້າ ເວົ້າກັບພວກທ່ານແລ້ວກ່ຽວກັບ ສາດສະດາຜູ້ນັ້ນທີ່ພຣະຜູ້ ເປັນເຈົ້າໄດ້ສະແດງໃຫ້ຂ້າພະເຈົ້າເຫັນ, ທີ່ຈະໃຫ້ບັບຕິສະມາແກ່ ພຣະເມສານ້ອຍຂອງພຣະເຈົ້າ, ຊຶ່ງຈະຍົກເອົາບາບຂອງໂລກ ໄປ.

Wherefore, I would that ye should remember that I have spoken unto you concerning that prophet which the Lord showed unto me, that should baptize the Lamb of God, which should take away the sins of the world.

ງ ແລະ ບັດນີ້, ຖ້າຫາກພຣະເມສານ້ອຍຂອງພຣະເຈົ້າ, ໂດຍທີ່ ພຣະອົງບໍລິສຸດຍັງຈຳຕ້ອງຮັບ ບັບຕິສະມາດ້ວຍນ້ຳ ເພື່ອໃຫ້ ຄວາມຊອບທຳທັງໝົດສຳເລັດ, ໂອ້ ແລ້ວພວກເຮົາ ໂດຍທີ່ບໍ່ ບໍລິສຸດ ຈະຍັງຕ້ອງຮັບບັບຕິສະມາຍິ່ງກວ່ານັ້ນພຽງໃດ, ແທ້ຈິງ ແລ້ວ, ແມ່ນດ້ວຍນ້ຳ!

And now, if the Lamb of God, he being holy, should have need to be baptized by water, to fulfil all righteousness, O then, how much more need have we, being unholy, to be baptized, yea, even by water!

ຈ ແລະ ບັດນີ້, ຂ້າພະເຈົ້າຢາກຖາມພວກທ່ານ, ພີ່ນ້ອງທີ່ຮັກ ແພງຂອງຂ້າພະເຈົ້າວ່າ, ດ້ວຍເລື່ອງໃດທີ່ພຣະເມສານ້ອຍຂອງ ພຣະເຈົ້າໄດ້ເຮັດໃຫ້ຄວາມຊອບທຳທັງໝົດສຳເລັດ ໂດຍການ ຮັບບັບຕິສະມາດ້ວຍນ້ຳ?

And now, I would ask of you, my beloved brethren, wherein the Lamb of God did fulfil all righteousness in being baptized by water?

ສ ພວກທ່ານບໍ່ຮູ້ບໍວ່າພຣະອົງບໍລິສຸດ? ແຕ່ເຖິງແມ່ນພຣະອົງ ບໍລິສຸດ, ພຣະອົງຍັງສະແດງແກ່ລູກຫລານມະນຸດວ່າ ຕາມທາງ ຂອງເນື້ອໜັງ ພຣະອົງຖ່ອມຕົວຕໍ່ພຣະພັກຂອງພຣະບິດາ, ແລະ ເປັນພະຍານຕໍ່ພຣະບິດາว່າ ຈະ ເຊື່ອຟັງພຣະອົງໃນການ ຮັກສາພຣະບັນຍັດຂອງພຣະອົງ.

Know ye not that he was holy? But notwithstanding he being holy, he showeth unto the children of men that, according to the flesh he humbleth himself before the Father, and witnesseth unto the Father that he would be obedient unto him in keeping his commandments.

ຫ ດັ່ງນັ້ນ, ຫລັງຈາກພຣະອົງຮັບບັບຕິສະມາດ້ວຍນ້ຳແລ້ວ ພຣະວິນຍານບໍລິສຸດຈຶ່ງສະເດັດລົງມາເທິງພຣະອົງໃນ ຮູບ ນົກເຂົາ.

Wherefore, after he was baptized with water the Holy Ghost descended upon him in the form of a dove.

ຈ ແລະ ອີກຢ່າງໜຶ່ງ, ມັນສະແດງໃຫ້ລູກຫລານມະນຸດເຫັນ ຄວາມຄັບຂອງທາງ, ແລະ ຄວາມແຄບຂອງ ປະຕູ, ຊຶ່ງ ໂດຍທາງນັ້ນພວກເຂົາຈະເຂົ້າໄປໂດຍທີ່ພຣະອົງເຮັດເປັນ ຕົວຢ່າງໄວ້ຕໍ່ໜ້າພວກເຂົາແລ້ວ.

And again, it showeth unto the children of men the straitness of the path, and the narrowness of the gate, by which they should enter, he having set the example before them.

ຈ ແລະ ພຣະອົງໄດ້ກ່າວກັບລູກຫລານມະນຸດວ່າ: ພວກທ່ານ ຈົ່ງ ຕາມເຮົາມາເຖີດ. ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງຂອງ ຂ້າພະເຈົ້າ, ພວກເຮົາຈະ ຕາມພຣະເຢຊູໄດ້ບໍນອກຈາກພວກ ເຮົາຈະເຕັມໃຈຮັກສາພຣະບັນຍັດຂອງພຣະບິດາ?

And he said unto the children of men: Follow thou me. Wherefore, my beloved brethren, can we follow Jesus save we shall be willing to keep the commandments of the Father?

ຈ ແລະ ພຣະບິດາໄດ້ກ່າວว่า: ຈົ່ງກັບໃຈ! ຈົ່ງກັບໃຈ, ແລະ ຮັບ ບັບຕິສະມາໃນພຣະນາມຂອງບຸດທີ່ຮັກຂອງເຮົາ.

And the Father said: Repent ye, repent ye, and be baptized in the name of my Beloved Son.

ຈ ແລະ ສຸລະສຽງຂອງພຣະບຸດມາເຖິງຂ້າພະເຈົ້າອີກ, ມີຄວາມ ว่า: ຄົນທີ່ຮັບບັບຕິສະມາໃນນາມຂອງເຮົາ, ພຣະບິດາຈະ ປະທານພຣະວິນຍານບໍລິສຸດໃຫ້ພວກເຂົາເໝືອນກັບເຮົາ; ດັ່ງນັ້ນ, ຈົ່ງ ຕາມເຮົາມາ, ແລະ ເຮັດສິ່ງທີ່ເຈົ້າເຫັນເຮົາເຮັດ.

And also, the voice of the Son came unto me, saying: He that is baptized in my name, to him will the Father give the Holy Ghost, like unto me; wherefore, follow me, and do the things which ye have seen me do.

ຈ ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າຮູ້ວ່າ ຖ້າຫາກພວກທ່ານຈະໄປຕາມພຣະບຸດດ້ວຍຈຸດປະສົງເຕັມທີ່ ແຫ່ງໃຈ ໂດຍບໍ່ເປັນຄົນໜ້າຊື່ໃຈຄົດ ແລະ ບໍ່ມີການຫລອກລວງ ຕໍ່ພຣະພັກຂອງພຣະເຈົ້າ, ແຕ່ດ້ວຍເຈດຕະນາອັນແທ້ຈິງ, ໂດຍ ການກັບໃຈຈາກບາບຂອງພວກທ່ານ, ໂດຍການເປັນພະຍານຕໍ່ ພຣະບິດາວ່າ ພວກທ່ານເຕັມໃຈຮັບເອົາພຣະນາມຂອງ ພຣະຄຣິດໂດຍ ການບັບຕິສະມາ—ແທ້ຈິງແລ້ວ, ໂດຍການ ຕາມພຣະຜູ້ເປັນເຈົ້າ ແລະ ພຣະຜູ້ຊ່ວຍໃຫ້ລອດຂອງທ່ານລົງ ໄປໃນນ້ຳຕາມພຣະຄຳຂອງພຣະອົງ ຈົ່ງເບິ່ງເມື່ອນັ້ນທ່ານຈະໄດ້ ຮັບພຣະວິນຍານບໍລິສຸດ; ແທ້ຈິງແລ້ວ, ເມື່ອນັ້ນ ການ ບັບຕິສະມາດ້ວຍໄຟ ແລະ ດ້ວຍພຣະວິນຍານບໍລິສຸດຈະ ມາເຖິງ; ແລະ ເມື່ອນັ້ນພວກທ່ານຈະເວົ້າໄດ້ດ້ວຍ ລີ້ນຂອງທູດ, ແລະ ຮ້ອງສັນລະເສີນແດ່ພຣະຜູ້ບໍລິສຸດຂອງອິດສະຣາເອນ.

But, behold, my beloved brethren, thus came the voice of the Son unto me, saying: After ye have repented of your sins, and witnessed unto the Father that ye are willing to keep my commandments, by the baptism of water, and have received the baptism of fire and of the Holy Ghost, and can speak with a new tongue, yea, even with the tongue of angels, and after this should deny me, it would have been better for you that ye had not known me.

ຈ ແຕ່ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ສຸລະສຽງ ຂອງພຣະບຸດມາເຖິງຂ້າພະເຈົ້າ, ມີຄວາມວ່າ: ຫລັງຈາກເຈົ້າ ກັບໃຈຈາກບາບຂອງເຈົ້າ ແລະ ເປັນພະຍານຕໍ່ພຣະບິດາວ່າ ເຈົ້າເຕັມໃຈຮັກສາບັນຍັດຂອງເຮົາ ໂດຍການບັບຕິສະມາດ້ວຍ ນ້ຳ, ແລະ ຮັບການບັບຕິສະມາດ້ວຍໄຟ ແລະ ດ້ວຍ ພຣະວິນຍານບໍລິສຸດ, ແລະ ເວົ້າດ້ວຍວາຈາໃໝ່, ແທ້ຈິງແລ້ວ, ແມ່ນດ້ວຍວາຈາຂອງທູດ, ແລະ ຫລັງຈາກນັ້ນຈະ ປະຕິເສດ ເຮົາ, ມັນຈະເປັນການ ດີກວ່າ ສຳລັບເຈົ້າຖ້າຫາກເຈົ້າບໍ່ໄດ້ຮູ້ຈັກ ເຮົາເລີຍ.

ຈ ແລະ ຂ້າພະເຈົ້າໄດ້ຍິນສຸລະສຽງຈາກພຣະບິດາ, ມີຄວາມ ว่า: ແທ້ຈິງແລ້ວ, ຄຳຂອງຜູ້ເປັນທີ່ຮັກຂອງເຮົາຈິງ ແລະ ຊື່ສັດ. ຜູ້ໃດອົດທົນຈົນເຖິງທີ່ສຸດ ຜູ້ນັ້ນຈະລອດ.

And I heard a voice from the Father, saying: Yea, the words of my Beloved are true and faithful. He that endureth to the end, the same shall be saved.

ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າຮູ້ດ້ວຍສິ່ງນີ້ວ່າ ນອກຈາກມະນຸດຈະ ອົດທົນຈົນເຖິງທີ່ສຸດໃນ ການທຳຕາມ ຕົວຢ່າງຂອງພຣະບຸດຂອງພຣະເຈົ້າຜູ້ຊົ່ງ ພຣະຊົນຢູ່, ເຂົາຈະລອດບໍ່ໄດ້.

ດັ່ງນັ້ນ, ຈົ່ງເຮັດສິ່ງທີ່ຂ້າພະເຈົ້າບອກພວກທ່ານວ່າ ຂ້າພະເຈົ້າໄດ້ເຫັນພຣະຜູ້ເປັນເຈົ້າຂອງພວກທ່ານ ແລະ ພຣະ ຜູ້ໄຖ່ຂອງພວກທ່ານເຮັດ; ເພາະດ້ວຍເຫດນີ້ ສິ່ງເຫລົ່ານີ້ຈົ່ງຖືກ ສະແດງແກ່ຂ້າພະເຈົ້າ ເພື່ອພວກທ່ານຈະໄດ້ຮູ້ຈັກປະຕູ ຊົ່ງ ໂດຍທາງນັ້ນພວກທ່ານຄວນເຂົ້າໄປ. ເພາະປະຕູທີ່ພວກທ່ານ ຄວນເຂົ້າໄປຄືການກັບໃຈ ແລະ ຮັບ ການບັບຕິສະມາດ້ວຍນ້ຳ; ແລະ ເວລານັ້ນ ການປົດບາບຂອງພວກທ່ານຈະມາເຖິງໂດຍ ໄຟ ແລະ ໂດຍພຣະວິນຍານບໍລິສຸດ.

ແລະ ເມື່ອພວກທ່ານຍອມຢູ່ໃນ ທາງ ຄັບ ແລະ ແຄບນີ້ຊົ່ງນຳ ໄປຫາຊີວິດນິລັນດອນ; ແທ້ຈົ່ງແລ້ວ, ພວກທ່ານເຂົ້າໄປໃນປະຕູ ແລ້ວ; ພວກທ່ານເຮັດຕາມພຣະບັນຍັດຂອງພຣະບິດາ ແລະ ພຣະບຸດ; ແລະ ພວກທ່ານຮັບພຣະວິນຍານບໍລິສຸດ ຊົ່ງເປັນ ພະຍານເຖິງພຣະບິດາ ແລະ ພຣະບຸດເພື່ອໃຫ້ສັນຍາ ຊົ່ງ ພຣະອົງເຮັດໄວ້ສຳເລັດ, ຄືຖ້າຫາກພວກທ່ານເຂົ້າໄປທາງນັ້ນ ພວກທ່ານຈະໄດ້ຮັບ.

ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຫລັງຈາກ ພວກທ່ານເຂົ້າໄປໃນທາງຄັບ ແລະ ແຄບນັ້ນແລ້ວ, ຂ້າພະເຈົ້າ ຢາກຖາມວ່າເຮັດທຸກຢ່າງ ແລ້ວບໍ? ຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບ ພວກທ່ານວ່າ, ບໍ່ເລີຍ; ເພາະພວກທ່ານບໍ່ໄດ້ມາເຖິງທີ່ນີ້ ນອກຈາກເປັນໄປໂດຍພຣະຄຳຂອງພຣະຄຣິດ, ພ້ອມດ້ວຍ ສັດທາອັນບໍ່ສັ່ນສະເທືອນໃນພຣະອົງ, ໂດຍ ໄວ້ວາງใจຢ່າງ ເຕັມທີ່ໃນພຣະຄຸນຄວາມດີຂອງພຣະອົງ ຜູ້ຊົ່ງອານຸພາບເພື່ອ ຊ່ວຍໃຫ້ລອດ.

ດັ່ງນັ້ນ, ພວກທ່ານຕ້ອງ ມຸ້ງໜ້າດ້ວຍຄວາມໝັ້ນຄົງໃນ ພຣະຄຣິດ, ໂດຍມີຄວາມສະຫວ່າງຢ່າງບໍລິບູນຂອງ ຄວາມ ຫວັງ ແລະ ຄວາມຮັກຂອງພຣະເຈົ້າ ແລະ ຂອງມະນຸດທັງປວງ. ດັ່ງນັ້ນ, ຖ້າຫາກພວກທ່ານຈະມຸ້ງໜ້າຊົ່ນຊົມດ້ວຍພຣະຄຳ ຂອງພຣະຄຣິດ ແລະ ອົດທົນຈົນເຖິງທີ່ສຸດແລ້ວ, ຈົ່ງເບິ່ງ, ພຣະບິດາໄດ້ກ່າວໄວ້ດັ່ງນີ້: ເຈົ້າຈະມີຊີວິດນິລັນດອນ.

ແລະ ບັດນີ້, ຈົ່ງເບິ່ງພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ນີ້ຄື ທາງນັ້ນ ແລະ ບໍ່ມີທາງ ຫລື ພຣະນາມອື່ນໃດຈະປະທານໃຫ້ ພາຍໃຕ້ສະຫວັນອີກເລີຍ ຊົ່ງໂດຍທາງນັ້ນມະນຸດຈະລອດໄດ້ໃນ ອານາຈັກຂອງພຣະເຈົ້າ. ແລະ ບັດນີ້, ຈົ່ງເບິ່ງ ນີ້ຄື ຄຳສອນຂອງ ພຣະຄຣິດ, ແລະ ຄືຄຳສອນອັນດຽວ ແລະ ແທ້ຈົ່ງຂອງ ພຣະບິດາ ແລະ ຂອງພຣະບຸດ ແລະ ຂອງພຣະວິນຍານບໍລິສຸດ, ຊົ່ງເປັນ ພຣະເຈົ້າອົງດຽວ, ທີ່ເປັນຢູ່ຕະຫລອດການ. ອາແມນ.

And now, my beloved brethren, I know by this that unless a man shall endure to the end, in following the example of the Son of the living God, he cannot be saved.

Wherefore, do the things which I have told you I have seen that your Lord and your Redeemer should do; for, for this cause have they been shown unto me, that ye might know the gate by which ye should enter. For the gate by which ye should enter is repentance and baptism by water; and then cometh a remission of your sins by fire and by the Holy Ghost.

And then are ye in this strait and narrow path which leads to eternal life; yea, ye have entered in by the gate; ye have done according to the commandments of the Father and the Son; and ye have received the Holy Ghost, which witnesses of the Father and the Son, unto the fulfilling of the promise which he hath made, that if ye entered in by the way ye should receive.

And now, my beloved brethren, after ye have gotten into this strait and narrow path, I would ask if all is done? Behold, I say unto you, Nay; for ye have not come thus far save it were by the word of Christ with unshaken faith in him, relying wholly upon the merits of him who is mighty to save.

Wherefore, ye must press forward with a steadfastness in Christ, having a perfect brightness of hope, and a love of God and of all men. Wherefore, if ye shall press forward, feasting upon the word of Christ, and endure to the end, behold, thus saith the Father: Ye shall have eternal life.

And now, behold, my beloved brethren, this is the way; and there is none other way nor name given under heaven whereby man can be saved in the kingdom of God. And now, behold, this is the doctrine of Christ, and the only and true doctrine of the Father, and of the Son, and of the Holy Ghost, which is one God, without end. Amen.

໒ ນີໄຟ ໓໒

໑ ແລະ ບັດນີ້, ຈົ່ງເບິ່ງພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ,
ຂ້າພະເຈົ້າຄິດວ່າພວກທ່ານໄຕ່ຕອງຢູ່ໃນໃຈແລ້ວກ່ຽວກັບສິ່ງທີ່
ພວກທ່ານຄວນເຮັດຫລັງຈາກເຂົ້າໄປໃນທາງນັ້ນ. ແຕ່ຈົ່ງເບິ່ງ,
ເຫດໃດພວກທ່ານຈຶ່ງໄຕ່ຕອງເລື່ອງເຫລົ່ານີ້ຢູ່ໃນໃຈອີກ?

໒ ພວກທ່ານຈຳໄດ້ບໍວ່າ ຂ້າພະເຈົ້າເວົ້າກັບພວກທ່ານວ່າ
ຫລັງຈາກ ຮັບພຣະວິນຍານບໍລິສຸດແລ້ວ ພວກທ່ານຈະເວົ້າ
ດ້ວຍລີ້ນຂອງທູດ? ແລະ ບັດນີ້, ພວກທ່ານຈະເວົ້າດ້ວຍ ລີ້ນ
ຂອງທູດໄດ້ແນວໃດນອກຈາກຈະເປັນໄປໂດຍພຣະວິນຍານ
ບໍລິສຸດ?

໓ ເຫລົ່າທູດກ່າວໂດຍອຳນາດຂອງພຣະວິນຍານບໍລິສຸດ;
ດັ່ງນັ້ນ ພວກເພິ່ນຈຶ່ງກ່າວພຣະຄຳຂອງພຣະຄຣິດ. ດັ່ງນັ້ນ,
ຂ້າພະເຈົ້າເວົ້າກັບພວກທ່ານວ່າ, ຈົ່ງ ຊື່ນຊົມດ້ວຍພຣະຄຳຂອງ
ພຣະຄຣິດ; ເພາະຈົ່ງເບິ່ງ, ພຣະຄຳຂອງພຣະຄຣິດຈະບອກ
ພວກທ່ານທຸກຢ່າງທີ່ພວກທ່ານຄວນເຮັດ.

໔ ດັ່ງນັ້ນ, ບັດນີ້ຫລັງຈາກຂ້າພະເຈົ້າເວົ້າຂໍ້ຄວາມນີ້ແລ້ວ ຖ້າ
ຫາກພວກທ່ານບໍ່ເຂົ້າໃຈມັນກໍເປັນເພາະພວກທ່ານບໍ່ ໝັ່ນຂໍ
ແລະ ທັງພວກທ່ານບໍ່ໝັ່ນເຄາະ; ດັ່ງນັ້ນ, ພວກທ່ານຈຶ່ງບໍ່ຖືກ
ພາມາຫາຄວາມສະຫວ່າງ, ແຕ່ຕ້ອງຕາຍຢູ່ໃນຄວາມມືດ.

໕ ເພາະຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບພວກທ່ານອີກວ່າ ຖ້າຫາກ
ພວກທ່ານຈະເຂົ້າໄປໂດຍທາງນັ້ນ ແລະ ໄດ້ຮັບພຣະວິນຍານ
ບໍລິສຸດ, ພຣະອົງຈະສະແດງທຸກຢ່າງທີ່ພວກທ່ານຄວນເຮັດໃຫ້
ແກ່ພວກທ່ານ.

໖ ຈົ່ງເບິ່ງ, ນີ້ຄືຄຳສອນຂອງພຣະຄຣິດ, ແລະ ຈະບໍ່ມີຄຳສອນ
ປະທານໃຫ້ອີກຈົນຫລັງຈາກພຣະອົງຈະ ສະແດງພຣະອົງເອງ
ໃຫ້ປະຈັກແກ່ພວກທ່ານໃນເນື້ອໜັງ. ແລະ ເມື່ອພຣະອົງຈະ
ສະແດງພຣະອົງເອງໃຫ້ປະຈັກແກ່ທ່ານໃນເນື້ອໜັງແລ້ວ, ສິ່ງ
ທີ່ພຣະອົງຈະກ່າວກັບພວກທ່ານ, ພວກທ່ານຈົ່ງປະຕິບັດ.

໗ ແລະ ບັດນີ້, ຂ້າພະເຈົ້ານີໄຟເວົ້າອີກບໍ່ໄດ້; ພຣະວິນຍານຢຸດ
ການເອີ່ຍປາກຂອງຂ້າພະເຈົ້າ ແລະ ຂ້າພະເຈົ້າຈະຖືກຖິ້ມໃຫ້
ເປັນທຸກເພາະຄວາມ ບໍ່ເຊື່ອຖື, ແລະ ຄວາມຊົ່ວຮ້າຍ, ແລະ
ຄວາມໂງ່ຈ້າ ແລະ ຄວາມແຂງຄໍຂອງມະນຸດ; ເພາະພວກເຂົາບໍ່
ສະແຫວງຫາຄວາມຮູ້ທັງບໍ່ເຂົ້າໃຈຄວາມຮູ້ອັນຍິ່ງໃຫຍ່ທີ່ມີໃຫ້
ພວກເຂົາດ້ວຍຄວາມແຈ່ມແຈ້ງ, ເຖິງແມ່ນຄວາມແຈ່ມແຈ້ງ
ເທົ່າທີ່ຖ້ອຍຄຳຈະ ແຈ່ມແຈ້ງໄດ້.

2 Nephi 32

And now, behold, my beloved brethren, I suppose that ye ponder somewhat in your hearts concerning that which ye should do after ye have entered in by the way. But, behold, why do ye ponder these things in your hearts?

Do ye not remember that I said unto you that after ye had received the Holy Ghost ye could speak with the tongue of angels? And now, how could ye speak with the tongue of angels save it were by the Holy Ghost?

Angels speak by the power of the Holy Ghost; wherefore, they speak the words of Christ. Wherefore, I said unto you, feast upon the words of Christ; for behold, the words of Christ will tell you all things what ye should do.

Wherefore, now after I have spoken these words, if ye cannot understand them it will be because ye ask not, neither do ye knock; wherefore, ye are not brought into the light, but must perish in the dark.

For behold, again I say unto you that if ye will enter in by the way, and receive the Holy Ghost, it will show unto you all things what ye should do.

Behold, this is the doctrine of Christ, and there will be no more doctrine given until after he shall manifest himself unto you in the flesh. And when he shall manifest himself unto you in the flesh, the things which he shall say unto you shall ye observe to do.

And now I, Nephi, cannot say more; the Spirit stoppeth mine utterance, and I am left to mourn because of the unbelief, and the wickedness, and the ignorance, and the stiffneckedness of men; for they will not search knowledge, nor understand great knowledge, when it is given unto them in plainness, even as plain as word can be.

ຖ ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າ ເຫັນວ່າ ພວກທ່ານຍັງໄຕ່ຕອງຢູ່ໃນໃຈ; ແລະ ມັນເຮັດໃຫ້ ຂ້າພະເຈົ້າໂສກເສົ້າທີ່ຕ້ອງໄດ້ເວົ້າກ່ຽວກັບເລື່ອງນີ້ກັບພວກ ທ່ານ. ເພາະຖ້າຫາກພວກທ່ານຈະເຊື່ອຟັງພຣະວິນຍານຊຶ່ງ ສິດສອນມະນຸດໃຫ້ ອະທິຖານ, ພວກທ່ານຈະຮູ້ວ່າພວກທ່ານ ຕ້ອງອະທິຖານ; ເພາະ ວິນຍານຊົ່ວບໍ່ສິດສອນມະນຸດໃຫ້ ອະທິຖານ, ແຕ່ສິດສອນເຂົາວ່າບໍ່ຕ້ອງອະທິຖານ.

ດ ແຕ່ຈົ່ງເບິ່ງ, ຂ້າພະເຈົ້າຂໍເວົ້າກັບພວກທ່ານວ່າ ພວກທ່ານ ຕ້ອງ ອະທິຖານສະເໝີ ແລະ ບໍ່ຕ້ອງທໍ້ຖອຍ; ວ່າພວກທ່ານ ຕ້ອງບໍ່ເຮັດສິ່ງໃດທີ່ຈະຖວາຍແດ່ພຣະຜູ້ເປັນເຈົ້າ ນອກຈາກຂັ້ນ ທຳອິດພວກທ່ານຕ້ອງອະທິຖານຫາພຣະບິດາໃນ ພຣະນາມ ຂອງພຣະຄຣິດເສຍກ່ອນ, ເພື່ອພຣະອົງຈະເຮັດໃຫ້ການ ປະຕິບັດຂອງພວກທ່ານສັກສິດແກ່ພວກທ່ານ, ເພື່ອການ ປະຕິບັດຂອງພວກທ່ານຈະເປັນໄປເພື່ອ ຄວາມຜາສຸກຂອງ ຈິດວິນຍານຂອງພວກທ່ານເອງ.

And now, my beloved brethren, I perceive that ye ponder still in your hearts; and it grieveth me that I must speak concerning this thing. For if ye would hearken unto the Spirit which teacheth a man to pray, ye would know that ye must pray; for the evil spirit teacheth not a man to pray, but teacheth him that he must not pray.

But behold, I say unto you that ye must pray always, and not faint; that ye must not perform any thing unto the Lord save in the first place ye shall pray unto the Father in the name of Christ, that he will consecrate thy performance unto thee, that thy performance may be for the welfare of thy soul.

ຂ ນີໄຟ ມ.ມ

2 Nephi 33

ນ ແລະ ບັດນີ້ຂ້າພະເຈົ້ານີໄຟບັນທຶກເລື່ອງທັງໝົດທີ່ສິດສອນໃນ ບັນດາຜູ້ຄົນຂອງຂ້າພະເຈົ້າໄວ້ບໍ່ໄດ້; ທັງຂ້າພະເຈົ້າບໍ່ສາມາດ ບັນທຶກ ໄວ້ໄດ້ດີເທົ່າກັບການເວົ້າ; ເພາະວ່າເມື່ອມີຜູ້ໃດ ເວົ້າໂດຍ ອຳນາດຂອງພຣະວິນຍານບໍລິສຸດ ອຳນາດຂອງພຣະວິນຍານ ບໍລິສຸດຍ່ອມນຳຄຳເວົ້າໄປຫາໃຈຂອງລູກຫລານມະນຸດ.

And now I, Nephi, cannot write all the things which were taught among my people; neither am I mighty in writing, like unto speaking; for when a man speaketh by the power of the Holy Ghost the power of the Holy Ghost carrieth it unto the hearts of the children of men.

ບ ແຕ່ຈົ່ງເບິ່ງ, ມີຄົນເປັນຈຳນວນຫລວງຫລາຍທີ່ເຮັດໃຈ ແຂງ ກະດ້າງຕໍ່ພຣະວິນຍານສັກສິດ ຈົນພຣະອົງບໍ່ມີບ່ອນຢູ່ໃນພວກ ເຂົາ; ດັ່ງນັ້ນ, ພວກເຂົາຈຶ່ງປະຖິ້ມຫລາຍສິ່ງຫລາຍຢ່າງທີ່ໄດ້ ບັນທຶກໄວ້ ແລະ ຖືວ່າມັນບໍ່ມີຄຸນຄ່າ.

But behold, there are many that harden their hearts against the Holy Spirit, that it hath no place in them; wherefore, they cast many things away which are written and esteem them as things of naught.

ມ ແຕ່ຂ້າພະເຈົ້ານີໄຟບັນທຶກເລື່ອງທີ່ຂ້າພະເຈົ້າໄດ້ຂຽນໄວ້, ແລະ ຂ້າພະເຈົ້າຖືວ່າມັນມີ ຄຸນຄ່າອັນໃຫຍ່ຫລວງ, ແລະ ໂດຍ ສະເພາະຕໍ່ຜູ້ຄົນຂອງຂ້າພະເຈົ້າ. ເພາະຂ້າພະເຈົ້າ ອະທິຖານຢູ່ ຕະຫລອດເວລາ ເພື່ອພວກເຂົາໃນເວລາກາງເວັນ, ແລະ ຕາ ຂອງຂ້າພະເຈົ້າເຮັດໃຫ້ໝອນຂອງຂ້າພະເຈົ້າປຽກໃນເວລາ ກາງຄືນ ເພາະພວກເຂົາ; ແລະ ຂ້າພະເຈົ້າຮ້ອງທູນຕໍ່ພຣະເຈົ້າ ຂອງຂ້າພະເຈົ້າດ້ວຍສັດທາ ແລະ ຂ້າພະເຈົ້າຮູ້ວ່າ, ພຣະອົງຈະ ໄດ້ຍິນສຽງຂອງຂ້າພະເຈົ້າ.

But I, Nephi, have written what I have written, and I esteem it as of great worth, and especially unto my people. For I pray continually for them by day, and mine eyes water my pillow by night, because of them; and I cry unto my God in faith, and I know that he will hear my cry.

ສ ແລະ ຂ້າພະເຈົ້າຮູ້ວ່າ ອົງພຣະຜູ້ເປັນເຈົ້າຈະອຸທິດຄຳ ອະທິຖານຂອງຂ້າພະເຈົ້າ ເພື່ອຜົນປະໂຫຍດຂອງຜູ້ຄົນຂອງ ຂ້າພະເຈົ້າ. ແລະ ຂໍ້ຄວາມທີ່ຂ້າພະເຈົ້າບັນທຶກໄວ້ດ້ວຍຄວາມ ອ່ອນແອຈະຖືກເຮັດໃຫ້ ເຂັ້ມແຂງຂຶ້ນເພື່ອພວກເຂົາ; ເພາະມັນ ຈະ ຊັກຊວນໃຫ້ພວກເຂົາເຮັດຄວາມດີ; ມັນຈະເຮັດໃຫ້ພວກ ເຂົາຮູ້ເລື່ອງບັນພະບຸລຸດຂອງພວກເຂົາ; ແລະ ມັນກ່າວເຖິງ ພຣະເຢຊູ ແລະ ຊັກຊວນໃຫ້ພວກເຂົາເຊື່ອໃນພຣະອົງ ແລະ ອົດທົນຈົນເຖິງທີ່ສຸດ ຊຶ່ງມັນຄືຊີວິດ ນິລັນດອນ.

And I know that the Lord God will consecrate my prayers for the gain of my people. And the words which I have written in weakness will be made strong unto them; for it persuadeth them to do good; it maketh known unto them of their fathers; and it speaketh of Jesus, and persuadeth them to believe in him, and to endure to the end, which is life eternal.

ຫ ແລະ ມັນໄດ້ກ່າວ ຮຸນແຮງຕົ້ດຽນບາບ, ຕາມ ຄວາມແຈ່ມ ແຈ້ງຂອງຄວາມຈິງ; ດັ່ງນັ້ນ, ບໍ່ມີຜູ້ໃດຈະກຽດຊັງ ຂໍ້ຄວາມທີ່ ຂ້າພະເຈົ້າບັນທຶກໄວ້ນອກຈາກພວກເຂົາຈະເປັນຂອງວິນຍານ ຂອງມານ.

And it speaketh harshly against sin, according to the plainness of the truth; wherefore, no man will be angry at the words which I have written save he shall be of the spirit of the devil.

ຫ ຂ້າພະເຈົ້າປາບປື້ມໃນຄວາມແຈ່ມແຈ້ງ; ຂ້າພະເຈົ້າປາບປື້ມ ໃນຄວາມຈິງ; ຂ້າພະເຈົ້າປາບປື້ມໃນພຣະເຢຊູຂອງຂ້າພະເຈົ້າ, ເພາະພຣະອົງໄດ້ ໄຖ່ຈິດວິນຍານຂອງຂ້າພະເຈົ້າຈາກນະລົກ.

I glory in plainness; I glory in truth; I glory in my Jesus, for he hath redeemed my soul from hell.

ກ ຂ້າພະເຈົ້າມີ ຄວາມໃຈບຸນຕໍ່ຜູ້ຄົນຂອງຂ້າພະເຈົ້າ, ແລະ ສັດທາອັນແຮງກ້າໃນພຣະຄຣິດ ว่าข้าพะเจ้าจะพົບ ຈິດວິນຍານຫລວງຫລາຍທີ່ບໍ່ມີມົນທິນທີ່ບັນລັງພິພາກສາ ຂອງພຣະອົງ.

I have charity for my people, and great faith in Christ that I shall meet many souls spotless at his judgment-seat.

ຖ ຂ້າພະເຈົ້າມີຄວາມໃຈບຸນຕໍ່ ຊາວຢິວ—ຂ້າພະເຈົ້າກ່າວว่า ຊາວຢິວເພາະຂ້າພະເຈົ້າໝາຍເຖິງຜູ້ຊຶ່ງຂ້າພະເຈົ້າໄດ້ໜີຈາກ ມາ.

I have charity for the Jew—I say Jew, because I mean them from whence I came.

ນ ແລະ ຂ້າພະເຈົ້າມີຄວາມໃຈບຸນຕໍ່ ຄົນຕ່າງຊາດນຳອີກ. ແຕ່ຈົ່ງເບິ່ງ, ຂ້າພະເຈົ້າຫວັງໃນຄົນເຫລົ່ານີ້ບໍ່ໄດ້ ຖ້າຫາກພວກເຂົາບໍ່ ປອງດອງກັບພຣະຄຣິດ, ແລະ ເຂົ້າໄປໃນປະຕູທີ່ ແຄບ ແລະ ເດີນໄປໃນທາງທີ່ ຄັບ ຊຶ່ງນຳໄປສູ່ຊີວິດ, ແລະ ດຳເນີນຕໍ່ໄປໃນທາງນັ້ນຈົນເຖິງທີ່ສຸດຂອງວັນເວລາແຫ່ງການທົດລອງ.

I also have charity for the Gentiles. But behold, for none of these can I hope except they shall be reconciled unto Christ, and enter into the narrow gate, and walk in the strait path which leads to life, and continue in the path until the end of the day of probation.

໑໐ ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າກັບຊາວຢິວນຳອີກ, ແລະ ພວກທ່ານທັງຫລາຍທີ່ສຸດຂອງແຜ່ນດິນໂລກ, ຈົ່ງເຊື່ອຟັງຂໍ້ຄວາມເຫລົ່ານີ້ ແລະ ເຊື່ອໃນພຣະຄຣິດ; ແລະ ຖ້າຫາກພວກທ່ານບໍ່ເຊື່ອໃນຂໍ້ຄວາມເຫລົ່ານີ້ກໍຈົ່ງໃຫ້ເຊື່ອໃນພຣະຄຣິດ. ແລະ ຖ້າຫາກພວກທ່ານຈະເຊື່ອໃນພຣະຄຣິດ ພວກທ່ານຈະເຊື່ອໃນ ຂໍ້ຄວາມເຫລົ່ານີ້, ເພາະມັນເປັນ ພຣະຄຳຂອງພຣະຄຣິດ, ແລະ ພຣະອົງໄດ້ປະທານໃຫ້ຂ້າພະເຈົ້າ; ແລະ ມັນ ສິດສອນຄົນທັງປວງວ່າ ພວກເຂົາຄວນເຮັດຄວາມດີ.

And now, my beloved brethren, and also Jew, and all ye ends of the earth, hearken unto these words and believe in Christ; and if ye believe not in these words believe in Christ. And if ye shall believe in Christ ye will believe in these words, for they are the words of Christ, and he hath given them unto me; and they teach all men that they should do good.

๑๑ ແລະ ຖ້າຫາກພວກທ່ານຕັດສິນວ່າມັນບໍ່ເປັນພຣະຄຳຂອງພຣະຄຣິດ—ເພາະພຣະຄຣິດຈະສະແດງແກ່ພວກທ່ານໃນວັນສຸດທ້າຍດ້ວຍ ອຳນາດ ແລະ ລັດສະໝີພາບອັນຍິ່ງໃຫຍ່ວ່າ ມັນເປັນພຣະຄຳຂອງພຣະອົງ; ແລະ ພວກທ່ານກັບຂ້າພະເຈົ້າຈະປະເຊີນໜ້າກັນຢູ່ ບ່ອນພິພາກສາຂອງພຣະອົງ; ແລະ ພວກທ່ານຈະຮູ້ວ່າ ຂ້າພະເຈົ້າໄດ້ຮັບບັນຊາຈາກພຣະອົງໃຫ້ບັນທຶກເລື່ອງເຫລົ່ານີ້ເຖິງແມ່ນຂ້າພະເຈົ້າອ່ອນແອ.

And if they are not the words of Christ, judge ye—for Christ will show unto you, with power and great glory, that they are his words, at the last day; and you and I shall stand face to face before his bar; and ye shall know that I have been commanded of him to write these things, notwithstanding my weakness.

๑๒ ແລະ ຂ້າພະເຈົ້າອະທິຖານຕໍ່ພຣະບິດາໃນພຣະນາມຂອງພຣະຄຣິດວ່າ ຫລາຍຄົນພວກເຮົາຖ້າຫາກບໍ່ແມ່ນໝົດທຸກຄົນ ຂໍໃຫ້ໄດ້ຮັບຄວາມລອດໃນ ອານາຈັກຂອງພຣະອົງໃນວັນຍິ່ງໃຫຍ່ ແລະ ສຸດທ້າຍນັ້ນເທີ້ນ.

And I pray the Father in the name of Christ that many of us, if not all, may be saved in his kingdom at that great and last day.

๑ນ ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຄົນທັງປວງທີ່ເປັນເຊື້ອສາຍອິດສະຣາເອນ, ແລະ ທ່ານທັງຫລາຍທີ່ສຸດຂອງແຜ່ນດິນໂລກ, ຂ້າພະເຈົ້າຂໍເວົ້າກັບພວກທ່ານຄືສຽງຂອງຄົນທີ່ ຮ້ອງອອກມາຈາກພື້ນດິນ: ລາກ່ອນຈົນກວ່າວັນອັນຍິ່ງໃຫຍ່ນັ້ນຈະມາເຖິງ.

And now, my beloved brethren, all those who are of the house of Israel, and all ye ends of the earth, I speak unto you as the voice of one crying from the dust: Farewell until that great day shall come.

๑໔ ແລະ ຕໍ່ຜູ້ທີ່ບໍ່ຍອມຮັບພຣະກະລຸນາທິຄຸນຂອງພຣະເຈົ້າ, ແລະ ບໍ່ນັບຖື ຖ້ອຍຄຳຂອງຊາວຢິວ, ແລະ ຄຳເວົ້າຂອງຂ້າພະເຈົ້ານຳອີກ, ແລະ ກັບຖ້ອຍຄຳຊຶ່ງຈະອອກຈາກປາກຂອງພຣະເມສານ້ອຍຂອງພຣະເຈົ້າ, ຈົ່ງເບິ່ງ, ຂ້າພະເຈົ້າຂໍກ່າວອຳລາອັນເປັນນິດກັບທ່ານ, ເພາະຂໍ້ຄວາມເຫລົ່ານີ້ຈະກ່າວໂທດທ່ານໃນວັນສຸດທ້າຍ.

And you that will not partake of the goodness of God, and respect the words of the Jews, and also my words, and the words which shall proceed forth out of the mouth of the Lamb of God, behold, I bid you an everlasting farewell, for these words shall condemn you at the last day.

๑໕ ເພາະສິ່ງທີ່ຂ້າພະເຈົ້າຜະນึกไว้ເທິງແຜ່ນດິນໂລກ, ຈະຖືກນຳມາຟ້ອງທ່ານທີ່ ບັນລັງພິພາກສາ; ເພາະພຣະຜູ້ເປັນເຈົ້າບັນຊາຂ້າພະເຈົ້າດັ່ງນີ້, ແລະ ຂ້າພະເຈົ້າຕ້ອງເຊື່ອຟັງ. ອາແມນ.

For what I seal on earth, shall be brought against you at the judgment bar; for thus hath the Lord commanded me, and I must obey. Amen.

ໜັງສືຢາໂຄບ

ນ້ອງຊາຍຂອງນີໄຟ

ຂໍ້ຄວາມທີ່ເພິ່ນສັ່ງສອນພີ່ນ້ອງຂອງເພິ່ນ. ເພິ່ນເຮັດໃຫ້ຊາຍຄົນໜຶ່ງຊຶ່ງພະຍາຍາມໂຄ່ນລົ້ມຄຳສອນຂອງພຣະຄຣິດຍອມ ຈຳນົນ. ຂໍ້ຄວາມສັ້ນໆກ່ຽວກັບປະຫວັດສາດຂອງຜູ້ຄົນຂອງນີ ໄຟ.

ຢາໂຄບ ๑

๑ ເພາະຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນຄື ຫ້າສິບຫ້າປີຜ່ານໄປ ນັບຕັ້ງແຕ່ເວລາທີ່ລີໄຮໄດ້ໜີຈາກເຢຣູຊາເລັມມາ; ດັ່ງນັ້ນ, ນີໄຟ ໃຫ້ ບັນຍັດໄວ້ກັບຂ້າພະເຈົ້າ ຢາໂຄບກ່ຽວກັບແຜ່ນຈາລຶກ ນ້ອຍ ຊຶ່ງໃນແຜ່ນຈາລຶກນັ້ນມີເລື່ອງເຫລົ່ານີ້ບັນທຶກໄວ້.

๒ ແລະ ນີໄຟໃຫ້ບັນຍັດກັບຂ້າພະເຈົ້າຢາໂຄບວ່າຂ້າພະເຈົ້າ ຄວນບັນທຶກອີກສອງສາມເລື່ອງໄວ້ໃນແຜ່ນຈາລຶກເຫລົ່ານີ້ ຊຶ່ງ ຂ້າພະເຈົ້າເຫັນວ່າມັນມີຄຸນຄ່າທີ່ສຸດ; ວ່າຂ້າພະເຈົ້າບໍ່ຄວນແຕະ ຕ້ອງນອກຈາກພຽງເລັກໜ້ອຍກ່ຽວກັບປະຫວັດສາດຂອງ ຜູ້ຄົນພວກນີ້ ຊຶ່ງມີຊື່ວ່າ ຜູ້ຄົນຂອງນີໄຟ.

๓ ເພາະເພິ່ນໄດ້ເວົ້າວ່າ ປະຫວັດສາດຂອງຜູ້ຄົນຂອງເພິ່ນຄວນ ບັນທຶກໄວ້ໃນແຜ່ນຈາລຶກອີກຊຸດໜຶ່ງຂອງເພິ່ນ, ແລະ ຂ້າພະເຈົ້າຄວນຮັກສາແຜ່ນຈາລຶກເຫລົ່ານີ້ ແລະ ມອບໃຫ້ແກ່ ລູກຫລານຂອງຂ້າພະເຈົ້າ, ຈາກລຸ້ນສູ່ລຸ້ນ.

๔ ແລະ ຖ້າຫາກມີການສັ່ງສອນອັນສັກສິດ ຫລື ການເປີດເຜີຍ ອັນຍິ່ງໃຫຍ່ ຫລື ການທຳນາຍ, ວ່າຂ້າພະເຈົ້າຕ້ອງບັນທຶກ ຫົວຂໍ້ເລື່ອງໄວ້ໃນແຜ່ນຈາລຶກເຫລົ່ານີ້, ແລະ ບັນທຶກມັນໃຫ້ ຫລາຍ ຄືກັບວ່າ ເທົ່າທີ່ຈະເຮັດໄດ້, ເພື່ອເຫັນແກ່ພຣະຄຣິດ ແລະ ເພື່ອເຫັນແກ່ຜູ້ຄົນຂອງພວກເຮົາ.

๕ ເພາະເປັນຍ້ອນສັດທາ ແລະ ຄວາມກັງວົນອັນໃຫຍ່ຫລວງ, ສິ່ງເຫລົ່ານີ້ຈຶ່ງຖືກສະແດງໃຫ້ປະຈັກແທ້ໆແກ່ພວກເຮົາ ກ່ຽວກັບຜູ້ຄົນຂອງພວກເຮົາ, ວ່າສິ່ງໃດຈະ ເກີດຂຶ້ນກັບພວກ ເຂົາ.

๖ ແລະ ພວກເຮົາໄດ້ຮັບການເປີດເຜີຍຫລາຍຢ່າງອີກ, ແລະ ມີ ວິນຍານແຫ່ງການທຳນາຍຫລາຍຢ່າງ; ດັ່ງນັ້ນພວກເຮົາຈຶ່ງ ຮູ້ຈັກເລື່ອງຂອງ ພຣະຄຣິດ ແລະ ອານາຈັກຂອງພຣະອົງທີ່ຈະ ມາເຖິງ.

The Book of Jacob

the Brother of Nephi

The words of his preaching unto his brethren. He confoundeth a man who seeketh to overthrow the doctrine of Christ. A few words concerning the history of the people of Nephi.

Jacob 1

For behold, it came to pass that fifty and five years had passed away from the time that Lehi left Jerusalem; wherefore, Nephi gave me, Jacob, a commandment concerning the small plates, upon which these things are engraven.

And he gave me, Jacob, a commandment that I should write upon these plates a few of the things which I considered to be most precious; that I should not touch, save it were lightly, concerning the history of this people which are called the people of Nephi.

For he said that the history of his people should be engraven upon his other plates, and that I should preserve these plates and hand them down unto my seed, from generation to generation.

And if there were preaching which was sacred, or revelation which was great, or prophesying, that I should engraven the heads of them upon these plates, and touch upon them as much as it were possible, for Christ's sake, and for the sake of our people.

For because of faith and great anxiety, it truly had been made manifest unto us concerning our people, what things should happen unto them.

And we also had many revelations, and the spirit of much prophecy; wherefore, we knew of Christ and his kingdom, which should come.

໗ ດັ່ງນັ້ນ, ພວກເຮົາຈຶ່ງອອກແຮງງານຢ່າງພາກພຽນໃນ
ບັນດາຜູ້ຄົນຂອງພວກເຮົາ, ເພື່ອພວກເຮົາຈະໄດ້ຊັກຊວນພວກ
ເຂົາໃຫ້ ມາຫາພຣະຄຣິດ, ແລະ ມີສ່ວນຮັບພຣະກະລຸນາທິຄຸນ
ຂອງພຣະເຈົ້າ, ເພື່ອພວກເຂົາຈະໄດ້ເຂົ້າໄປໃນ ທີ່ພັກຂອງ
ພຣະອົງ ຍົກເວັ້ນແຕ່ພຣະອົງປະຕິຍານໃນພຣະພິໂລດຂອງ
ພຣະອົງວ່າບໍ່ໃຫ້ພວກເຂົາ ເຂົ້າໄປ ດັ່ງເຊັ່ນພຣະອົງໄດ້ ຂຸ່ນ
ເຄືອງໃນວັນແຫ່ງການທົດລອງຂອງລູກຫລານອິດສະຣາເອນ
ຂະນະທີ່ເຂົາເຈົ້າຢູ່ໃນ ຖິ່ນແຫ້ງແລ້ງກັນດານ.

Wherefore we labored diligently among our people, that we might persuade them to come unto Christ, and partake of the goodness of God, that they might enter into his rest, lest by any means he should swear in his wrath they should not enter in, as in the provocation in the days of temptation while the children of Israel were in the wilderness.

໘ ດັ່ງນັ້ນ, ພວກເຮົາປາດຖະໜາຕໍ່ພຣະເຈົ້າວ່າ ພວກເຮົາຈະ
ຊັກຊວນຄົນທັງປວງບໍ່ໃຫ້ ກະບົດຕໍ່ພຣະເຈົ້າທີ່ຈະ ກໍ່ກວນ
ພຣະອົງໃຫ້ພຣະພິໂລດ, ແຕ່ເພື່ອຄົນທັງປວງຈະເຊື່ອໃນ
ພຣະຄຣິດ ແລະ ເຫັນແກ່ການສິ້ນພຣະຊົນຂອງພຣະອົງ ແລະ
ທົນຮັບເອົາ ໄມ້ກາງແຂນຂອງພຣະອົງ ແລະ ຍອມຮັບເອົາ
ຄວາມອັບອາຍຂາຍໜ້າຂອງໂລກ; ດັ່ງນັ້ນ, ຂ້າພະເຈົ້າຢາໂຄບ
ຈຶ່ງຖືວ່າ ມັນເປັນໜ້າທີ່ຂອງຂ້າພະເຈົ້າທີ່ຈະເຮັດຕາມບັນຍັດ
ຂອງນີໄຟອ້າຍຂອງຂ້າພະເຈົ້າ.

Wherefore, we would to God that we could persuade all men not to rebel against God, to provoke him to anger, but that all men would believe in Christ, and view his death, and suffer his cross and bear the shame of the world; wherefore, I, Jacob, take it upon me to fulfil the commandment of my brother Nephi.

໙ ບັດນີ້ນີໄຟໄດ້ເຖົ້າແກ່ລົງ, ແລະ ເພິ່ນເຫັນວ່າເພິ່ນຈະ ຕາຍໄປ
ໃນໄວໆນີ້; ດັ່ງນັ້ນ, ເພິ່ນຈຶ່ງ ເຈີມຊາຍຄົນໜຶ່ງໃຫ້ເປັນກະສັດຄົນ
ຕໍ່ໄປ ແລະ ປົກຄອງຜູ້ຄົນຂອງເພິ່ນຕາມການສືບຄອງລາຊາ
ບັນລັງຂອງ ກະສັດ.

Now Nephi began to be old, and he saw that he must soon die; wherefore, he anointed a man to be a king and a ruler over his people now, according to the reigns of the kings.

໑໐ ຜູ້ຄົນມີຄວາມຮັກແພງຕໍ່ນີໄຟຢ່າງເຫລືອລົ້ນ, ເພາະເພິ່ນ
ເປັນຜູ້ປົກປັກຮັກສາທີ່ຍິ່ງໃຫຍ່ຂອງພວກເຂົາ, ໂດຍທີ່ປັດປ່າຍ
ດາບຂອງລາບານເພື່ອປ້ອງກັນພວກເຂົາ, ແລະ ໂດຍການອອກ
ແຮງງານຕະຫລອດວັນເວລາຂອງເພິ່ນເພື່ອຄວາມຜາສຸກຂອງ
ພວກເຂົາ—

The people having loved Nephi exceedingly, he having been a great protector for them, having wielded the sword of Laban in their defence, and having labored in all his days for their welfare—

໑໑ ດັ່ງນັ້ນ, ຜູ້ຄົນຈຶ່ງປາດຖະໜາຈະເກັບກຳຊື່ຂອງເພິ່ນໄວ້ໃນ
ຄວາມຊົງຈຳ. ແລະ ຜູ້ໃດທີ່ຈະຂຶ້ນປົກຄອງແທນເພິ່ນ, ຜູ້ຄົນກໍ
ຈະເອີ້ນວ່ານີໄຟທີສອງ, ນີໄຟທີສາມ, ແລະ ຕໍ່ໆກັນໄປຕາມການ
ສືບຄອງລາຊາບັນລັງຂອງກະສັດ; ແລະ ຜູ້ຄົນເອີ້ນກະສັດວ່າ
ແນວນີ້ ເຖິງວ່າຈະມີຊື່ອັນອື່ນກໍຕາມ.

Wherefore, the people were desirous to retain in remembrance his name. And whoso should reign in his stead were called by the people, second Nephi, third Nephi, and so forth, according to the reigns of the kings; and thus they were called by the people, let them be of whatever name they would.

໑໒ ແລະ ເຫດການໄດ້ບັງເກີດຂຶ້ນຄື ນີໄຟໄດ້ສິ້ນຊີວິດ.

And it came to pass that Nephi died.

໑໓ ບັດນີ້ຜູ້ຄົນຊຶ່ງບໍ່ແມ່ນ ຊາວເລມັນກໍເປັນ ຊາວນີໄຟ; ເຖິງ
ຢ່າງໃດກໍຕາມ, ພວກເຂົາຍັງຖືກເອີ້ນວ່າ ຊາວນີໄຟ, ຊາວ
ຢາໂຄບ, ຊາວໂຢເຊັບ, ຊາວໂຊຣຳ, ຊາວເລມັນ, ຊາວເລມູເອນ,
ແລະ ຊາວອິດຊະມາເອນ.

Now the people which were not Lamanites were Nephites; nevertheless, they were called Nephites, Jacobites, Josephites, Zoramites, Lamanites, Lemuelites, and Ishmaelites.

໑໔ ແຕ່ວ່າຂ້າພະເຈົ້າຢາໂຄບຈະບໍ່ແບ່ງແຍກພວກເຂົາຕາມຊື່
ເຫລົ່ານີ້, ແຕ່ຂ້າພະເຈົ້າຈະ ເອີ້ນພວກທີ່ພະຍາຍາມປອງຮ້າຍຜູ້
ຄົນຂອງນີໄຟວ່າ ຊາວເລມັນ, ສ່ວນຄົນທີ່ເປັນເພື່ອນມິດກັບນີ
ໄຟ, ຂ້າພະເຈົ້າຈະເອີ້ນວ່າ ຊາວນີໄຟ, ຫລື ຜູ້ຄົນຂອງນີໄຟຕາມ
ການສືບຄອງລາຊາບັນລັງຂອງກະສັດ.

But I, Jacob, shall not hereafter distinguish them by these names, but I shall call them Lamanites that seek to destroy the people of Nephi, and those who are friendly to Nephi I shall call Nephites, or the people of Nephi, according to the reigns of the kings.

ບ ૧૫ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນຂອງນີໄຟ ພາຍໃຕ້ການປົກຄອງຂອງກະສັດອົງທີສອງເລີ່ມມີໃຈແຂງ ກະດ້າງ, ແລະ ຍອມຕົນເຮັດຄວາມຊົ່ວຮ້າຍບາງຢ່າງເໝືອນ ກັນກັບດາວິດໃນສະໄໝກ່ອນທີ່ຢາກມີ ມະເຫສີ ແລະ ນາງ ສະໜົມຫລາຍຄົນ, ແລະ ໂຊໂລໂມນລູກຊາຍຂອງເພີ່ນກໍເໝືອນ ກັນ.

ບ ૧૬ ແທ້ຈິງແລ້ວ, ພວກເຂົາເລີ່ມຕົ້ນສະແຫວງຫາຄຳ ແລະ ເງິນ ເປັນຈຳນວນຫລວງຫລາຍ, ແລະ ເລີ່ມຕົ້ນເພີ້ຝັນດ້ວຍຄວາມ ທະນົງຕົວ.

ບ ૧૭ ດັ່ງນັ້ນຂ້າພະເຈົ້າຢາໂຄບຈຶ່ງໃຫ້ຂໍ້ຄວາມເຫລົ່ານີ້ແກ່ພວກ ເຂົາໃນຂະນະທີ່ຂ້າພະເຈົ້າສິດສອນພວກເຂົາໃນ ພຣະວິຫານ, ໂດຍທີ່ຂ້າພະເຈົ້າໄດ້ຮັບ ວຽກງານຂອງຂ້າພະເຈົ້າຈາກພຣະຜູ້ ເປັນເຈົ້າແລ້ວ.

ບ ૧૮ ເພາະວ່າຂ້າພະເຈົ້າຢາໂຄບ ແລະ ໂຢເຊັບນ້ອງຊາຍຂອງ ຂ້າພະເຈົ້າ ໄດ້ຮັບການແຕ່ງຕັ້ງໂດຍມືຂອງນີໄຟໃຫ້ເປັນ ປະໂລຫິດ ແລະ ຜູ້ສອນຜູ້ຄົນພວກນີ້.

ບ ૧૯ ແລະ ພວກເຮົາໄດ້ຂະຫຍາຍ ໜ້າທີ່ຂອງພວກເຮົາແດ່ພຣະ ຜູ້ເປັນເຈົ້າ, ພວກເຮົາຕ້ອງມີ ຄວາມຮັບຜິດຊອບຮັບເອົາບາບ ຂອງຜູ້ຄົນໄວ້ເທິງຫົວຂອງພວກເຮົາເອງ ຖ້າຫາກພວກເຮົາບໍ່ ສິດສອນພຣະຄຳຂອງພຣະເຈົ້າໃຫ້ພວກເຂົາດ້ວຍຄວາມພາກ ພຽນຢ່າງເຕັມທີ່; ດັ່ງນັ້ນ ໂດຍການອອກແຮງງານດ້ວຍກຳລັງ ຂອງພວກເຮົາ ເລືອດຂອງພວກເຂົາຈະບໍ່ມາເປື້ອນອາພອນ ຂອງພວກເຮົາ; ຖ້າບໍ່ດັ່ງນັ້ນ ເລືອດຂອງພວກເຂົາຈະເປິເປື້ອນ ອາພອນຂອງພວກເຮົາ, ແລະ ຈະເຫັນວ່າພວກເຮົາບໍ່ ປາດສະຈາກມົນທິນໃນວັນສຸດທ້າຍ.

And now it came to pass that the people of Nephi, under the reign of the second king, began to grow hard in their hearts, and indulge themselves somewhat in wicked practices, such as like unto David of old desiring many wives and concubines, and also Solomon, his son.

Yea, and they also began to search much gold and silver, and began to be lifted up somewhat in pride.

Wherefore I, Jacob, gave unto them these words as I taught them in the temple, having first obtained mine errand from the Lord.

For I, Jacob, and my brother Joseph had been consecrated priests and teachers of this people, by the hand of Nephi.

And we did magnify our office unto the Lord, taking upon us the responsibility, answering the sins of the people upon our own heads if we did not teach them the word of God with all diligence; wherefore, by laboring with our might their blood might not come upon our garments; otherwise their blood would come upon our garments, and we would not be found spotless at the last day.

ຢາໂຄບ ๘

๑ ນີ້ຄືຂໍ້ຄວາມຊຶ່ງຢາໂຄບນ້ອງຊາຍຂອງນີໄຟໄດ້ເວົ້າກັບຜູ້ຄົນ
ຂອງນີໄຟຫລັງຈາກນີໄຟໄດ້ສິ້ນຊີວິດໄປແລ້ວ:

๘ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າຢາໂຄບ
ຕາມຄວາມຮັບຜິດຊອບຊຶ່ງຂ້າພະເຈົ້າມີຢູ່ພາຍໃຕ້ພຣະເຈົ້າ,
ຂ້າພະເຈົ້າຈະຂະຫຍາຍໜ້າທີ່ຂອງຂ້າພະເຈົ້າດ້ວຍສະຕິປັນຍາ,
ແລະ ເພື່ອຂ້າພະເຈົ້າຈະກຳຈັດບາບຂອງພວກທ່ານອອກຈາກ
ອາພອນຂອງຂ້າພະເຈົ້າ, ຂ້າພະເຈົ້າຈຶ່ງຂຶ້ນມາພຣະວິຫານໃນມື້
ນີ້ ເພື່ອຈະໄດ້ປະກາດພຣະຄຳຂອງພຣະເຈົ້າແກ່ພວກທ່ານ.

๙ ແລະ ຕົວພວກທ່ານເອງຮູ້ຈັກແລ້ວ ຕັ້ງແຕ່ຕົ້ນມາຂ້າພະເຈົ້າ
ໄດ້ເຮັດໜ້າທີ່ຂອງຂ້າພະເຈົ້າຢ່າງພາກພຽນຕາມທີ່ຂ້າພະເຈົ້າ
ໄດ້ຖືກຮຽກຮ້ອງໃຫ້ເຮັດ; ແຕ່ມື້ນີ້ຂ້າພະເຈົ້າຖືກຖ່ວງດຶງດ້ວຍ
ຄວາມປາດຖະໜາ ແລະ ຄວາມກະວົນກະວາຍເພື່ອຄວາມ
ຜາສຸກຂອງຈິດວິນຍານຂອງພວກທ່ານຍິ່ງກວ່າຂ້າພະເຈົ້າເຄີຍ
ມີມາກ່ອນ.

๑๐ ເພາະຈົ່ງເບິ່ງ, ຈົນມາເຖິງບັດນີ້ພວກທ່ານໄດ້ເຊື່ອຟັງ
ພຣະຄຳຂອງພຣະຜູ້ເປັນເจ້າ, ຊຶ່ງຂ້າພະເຈົ້າໄດ້ໃຫ້ໄວ້ກັບພວກ
ທ່ານ.

๑๑ ແຕ່ຈົ່ງເບິ່ງ, ພວກທ່ານຈົ່ງເຊື່ອຟັງຂ້າພະເຈົ້າ ແລະ ຈົ່ງຮູ້ໄວ້
ວ່າ ໂດຍຄວາມຊ່ວຍເຫລືອຂອງພຣະຜູ້ສ້າງສະຫວັນ ແລະ
ແຜ່ນດິນໂລກ ຜູ້ມີອຳນາດທັງປວງ, ຂ້າພະເຈົ້າຈະບອກພວກ
ທ່ານໄວ້ກ່ຽວກັບ ຄວາມນึกຄິດຂອງພວກທ່ານວ່າ, ພວກທ່ານ
ເລີ່ມຕົ້ນອອກແຮງງານໃນບາບ, ເບິ່ງແລ້ວບາບນັ້ນເປັນໜ້າ
ກຽດຊັງທີ່ສຸດສຳລັບຂ້າພະເຈົ້າ, ແທ້ຈິງແລ້ວ, ເປັນໜ້າກຽດຊັງ
ທີ່ສຸດຕໍ່ພຣະເจ້າ.

๑๒ ແທ້ຈິງແລ້ວ, ມັນເຮັດໃຫ້ຈິດວິນຍານຂອງຂ້າພະເຈົ້າ
ໂສກເສົ້າ ແລະ ເຮັດໃຫ້ຂ້າພະເຈົ້າກົ້ມໜ້າຢູ່ດ້ວຍຄວາມອັບອາຍ
ຕໍ່ໜ້າທີ່ປະທັບຂອງພຣະຜູ້ສ້າງຂອງຂ້າພະເຈົ້າ, ເພາະ
ຂ້າພະເຈົ້າຈະໄດ້ໃຫ້ຖ້ອຍຄຳແກ່ພວກທ່ານກ່ຽວກັບຄວາມ
ຊົ່ວຮ້າຍຂອງໃຈພວກທ່ານ.

๑๓ ແລະ ມັນເຮັດໃຫ້ຂ້າພະເຈົ້າໂສກເສົ້າອີກທີ່ຈະຕ້ອງໃຊ້ຄຳເວົ້າ
ຮຸນແຮງນຳພວກທ່ານຢູ່ຕໍ່ໜ້າເມຍຂອງພວກທ່ານ ແລະ ລູກ
ຂອງພວກທ່ານ ຜູ້ຊຶ່ງຄວາມຮູ້ສຶກຂອງພວກເຂົາຫລາຍຄົນ
ອ່ອນນ້ອມ ແລະ ບໍລິສຸດ ແລະ ລະມຸນລະໄມຕໍ່ພຣະພັກຂອງ
ພຣະເจ້າ, ຊຶ່ງເປັນສິ່ງທີ່ພໍພຣະໄທຕໍ່ພຣະເจ້າ;

๑๔ ແລະ ຂ້າພະເຈົ້າຄິດວ່າ ພວກເຂົາຂຶ້ນມາບ່ອນນີ້ ເພື່ອຈະໄດ້
ຍິນພຣະຄຳທີ່ໜ້າພໍໃຈຈາກພຣະເจ້າ, ແທ້ຈິງແລ້ວ, ແມ່ນ
ພຣະຄຳຂອງພຣະເจ້າ ຊຶ່ງປົ່ນປົວຈິດວິນຍານທີ່ຖືກບາດເຈັບ.

Jacob 2

The words which Jacob, the brother of Nephi, spake unto the people of Nephi, after the death of Nephi:

Now, my beloved brethren, I, Jacob, according to the responsibility which I am under to God, to magnify mine office with soberness, and that I might rid my garments of your sins, I come up into the temple this day that I might declare unto you the word of God.

And ye yourselves know that I have hitherto been diligent in the office of my calling; but I this day am weighed down with much more desire and anxiety for the welfare of your souls than I have hitherto been.

For behold, as yet, ye have been obedient unto the word of the Lord, which I have given unto you.

But behold, hearken ye unto me, and know that by the help of the all-powerful Creator of heaven and earth I can tell you concerning your thoughts, how that ye are beginning to labor in sin, which sin appeareth very abominable unto me, yea, and abominable unto God.

Yea, it grieveth my soul and causeth me to shrink with shame before the presence of my Maker, that I must testify unto you concerning the wickedness of your hearts.

And also it grieveth me that I must use so much boldness of speech concerning you, before your wives and your children, many of whose feelings are exceedingly tender and chaste and delicate before God, which thing is pleasing unto God;

And it supposeth me that they have come up hither to hear the pleasing word of God, yea, the word which healeth the wounded soul.

ດ ດັ່ງນັ້ນ, ມັນຈຶ່ງເປັນພາລະແບກຫາບຕໍ່ຈິດວິນຍານຂອງ
ຂ້າພະເຈົ້າ ຊຶ່ງຂ້າພະເຈົ້າຖືກບັງຄັບ ເພາະພຣະບັນຍັດອັນເຄັ່ງ
ຄັດ ຊຶ່ງຂ້າພະເຈົ້າໄດ້ຮັບມາຈາກພຣະເຈົ້າ ໃຫ້ຕັກເຕືອນພວກ
ທ່ານຕາມຄວາມຜິດຂອງພວກທ່ານ ແລະ ເຮັດໃຫ້ບາດແຜ
ຂອງຜູ້ທີ່ໄດ້ຮັບບາດເຈັບກວ້າງອອກແທນທີ່ຈະປອບໂຍນ ແລະ
ປິ່ນປົວບາດແຜໃຫ້ພວກເຂົາ; ແລະ ຄົນທີ່ບໍ່ໄດ້ຮັບບາດເຈັບ
ນັ້ນ, ແທນທີ່ຈະຊື່ນຊົມຢູ່ດ້ວຍພຣະຄຳຂອງພຣະເຈົ້າທີ່ໜ້າ
ພໍໃຈ ກໍມີດາບສອງຄົມມາວາງໄວ້ເພື່ອສຽບແທງຈິດວິນຍານ
ຂອງພວກເຂົາ ແລະ ເຮັດໃຫ້ຈິດໃຈອັນອ່ອນນ້ອມຂອງພວກເຂົາ
ໄດ້ຮັບບາດເຈັບ.

Wherefore, it burdeneth my soul that I should be constrained, because of the strict commandment which I have received from God, to admonish you according to your crimes, to enlarge the wounds of those who are already wounded, instead of consoling and healing their wounds; and those who have not been wounded, instead of feasting upon the pleasing word of God have daggers placed to pierce their souls and wound their delicate minds.

ຊ ແຕ່ທັງທີ່ເປັນວຽກງານໜັກຢ່າງໃຫຍ່ຫລວງ, ຂ້າພະເຈົ້າກໍ
ຕ້ອງເຮັດຕາມ ຄຳສັ່ງອັນເຄັ່ງຄັດຂອງພຣະເຈົ້າ, ແລະ ບອກ
ພວກທ່ານໃຫ້ຮູ້ກ່ຽວກັບຄວາມຊົ່ວຮ້າຍ ແລະ ຄວາມໜ້າ
ກຽດຊັງຂອງພວກທ່ານຕໍ່ໜ້າຜູ້ທີ່ມີໃຈບໍລິສຸດ, ແລະ ຄົນທີ່ມີ
ໃຈທີ່ຊອກຊ້ຳພາຍໃຕ້ການເຫລືອດພຣະເນດອັນ ແຫລມຄົມ
ຂອງພຣະເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່.

But, notwithstanding the greatness of the task, I must do according to the strict commands of God, and tell you concerning your wickedness and abominations, in the presence of the pure in heart, and the broken heart, and under the glance of the piercing eye of the Almighty God.

ຊເ ດັ່ງນັ້ນ, ຂ້າພະເຈົ້າຈຶ່ງເວົ້າກັບພວກທ່ານດ້ວຍຄວາມຈິງ
ແຈ່ມແຈ້ງແຫ່ງພຣະຄຳຂອງພຣະເຈົ້າ. ເພາະຈົ່ງເບິ່ງ, ໃນຂະນະ
ທີ່ຂ້າພະເຈົ້າທູນຖາມພຣະຜູ້ເປັນເຈົ້າຢູ່ນັ້ນ, ພຣະຄຳຂອງ
ພຣະອົງໄດ້ມາຫາຂ້າພະເຈົ້າ, ມີຄວາມວ່າ: ຢາໂຄບເຈົ້າຈົ່ງໄປຍັງ
ພຣະວິຫານໃນມື້ອື່ນນີ້, ແລະ ປະກາດພຣະຄຳຊຶ່ງເຮົາຈະ
ມອບໃຫ້ແກ່ເຈົ້າ ເພື່ອເຈົ້າຈະໄດ້ກ່າວຕໍ່ຜູ້ຄົນພວກນີ້.

Wherefore, I must tell you the truth according to the plainness of the word of God. For behold, as I inquired of the Lord, thus came the word unto me, saying: Jacob, get thou up into the temple on the morrow, and declare the word which I shall give thee unto this people.

ຊສ ແລະ ບັດນີ້ຈົ່ງເບິ່ງ, ພີ່ນ້ອງຂອງຂ້າພະເຈົ້າ, ນີ້ແມ່ນພຣະຄຳ
ຊຶ່ງຂ້າພະເຈົ້າຈະປະກາດແກ່ພວກທ່ານ, ຊຶ່ງພວກທ່ານຫລາຍ
ຄົນກຳລັງຄົ້ນຫາຄຳ, ແລະ ເງິນ, ແລະ ວັດຖຸນາງຊະນິດ, ຊຶ່ງມີ
ຢ່າງຫລວງຫລາຍເຕັມໄປດ້ວຍຄວາມອຸດົມສົມບູນທົ່ວ
ແຜ່ນດິນ, ອັນເປັນ ແຜ່ນດິນແຫ່ງຄຳສັນຍາສຳລັບພວກທ່ານ
ແລະ ລູກຫລານຂອງພວກທ່ານ.

And now behold, my brethren, this is the word which I declare unto you, that many of you have begun to search for gold, and for silver, and for all manner of precious ores, in the which this land, which is a land of promise unto you and to your seed, doth abound most plentifully.

ຊສເ ແລະ ພຣະຫັດແຫ່ງອາລັກຂາໄດ້ຍິ້ມຢູ່ເທິງພວກທ່ານຢ່າງ
ພໍພຣະໄທທີ່ສຸດ, ຈົນວ່າພວກທ່ານໄດ້ຂອງມີຄ່າຫລວງຫລາຍ;
ແລະ ເພາະວ່າບາງຄົນໃນບັນດາພວກທ່ານໄດ້ຮັບຫລາຍກວ່າ
ພີ່ນ້ອງຂອງພວກທ່ານ ແລ້ວພວກທ່ານຈຶ່ງຄິດ ລະເມີເພີ້ຝັນ
ດ້ວຍຄວາມທະນົງໃຈຫລາຍ ແລະ ເຮັດຄໍແຂງ ແລະ ອວດອ້າງ
ຍ້ອນວ່າເຄື່ອງນຸ່ງລາຄາແພງຂອງພວກທ່ານ, ແລະ ໄດ້ຂົ່ມເຫັງ
ພີ່ນ້ອງຂອງພວກທ່ານ ເພາະພວກທ່ານຄິດວ່າພວກທ່ານດີ
ກວ່າພວກເຂົາ.

And the hand of providence hath smiled upon you most pleasingly, that you have obtained many riches; and because some of you have obtained more abundantly than that of your brethren ye are lifted up in the pride of your hearts, and wear stiff necks and high heads because of the costliness of your apparel, and persecute your brethren because ye suppose that ye are better than they.

ຊສສ ແລະ ບັດນີ້ພີ່ນ້ອງຂອງຂ້າພະເຈົ້າ, ພວກທ່ານຄິດວ່າ
ພຣະເຈົ້າຮັບຮອງສິ່ງນີ້ເພື່ອພວກທ່ານບໍ? ຈົ່ງເບິ່ງ, ຂ້າພະເຈົ້າ
ກ່າວວ່າ, ບໍ່ເລີຍ. ແຕ່ພຣະອົງຈະກ່າວໂທດພວກທ່ານ, ແລະ ຖ້າ
ຫາກພວກທ່ານຍັງສືບຕໍ່ເຮັດສິ່ງເຫລົ່ານີ້ຢູ່ ການພິພາກສາ
ຂອງພຣະອົງຈະຕ້ອງມາສູ່ພວກທ່ານຢ່າງວ່ອງໄວ.

And now, my brethren, do ye suppose that God justifieth you in this thing? Behold, I say unto you, Nay. But he condemneth you, and if ye persist in these things his judgments must speedily come unto you.

ໂອ້ ຂໍໃຫ້ພຣະອົງສະແດງແກ່ພວກທ່ານວ່າ ພຣະອົງສາມາດ ສຽບແທງພວກທ່ານໄດ້ ແລະ ໂດຍການເຫລືອດສາຍພຣະເນດ ຂອງພຣະອົງຂ້າງດຽວ ພຣະອົງກໍລົງທັນພວກທ່ານໃຫ້ເປັນ ຝຸ່ນໄດ້!

O that he would show you that he can pierce you, and with one glance of his eye he can smite you to the dust!

ໂອ້ ຂໍໃຫ້ພຣະອົງຈົ່ງເອົາພວກທ່ານອອກຈາກຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງອັນນີ້ເຖີດ ແລະ ຂໍໃຫ້ພວກທ່ານຈົ່ງ ຟັງພຣະບັນຊາຂອງພຣະອົງ ແລະ ຢ່າໄດ້ໃຫ້ ຄວາມທະນົງໃຈ ອັນນີ້ມາທຳລາຍຈິດວິນຍານຂອງພວກທ່ານເລີຍ!

O that he would rid you from this iniquity and abomination. And, O that ye would listen unto the word of his commands, and let not this pride of your hearts destroy your souls!

ຈົ່ງຄິດວ່າ ພີ່ນ້ອງຂອງພວກທ່ານກໍເໝືອນກັນກັບຕົວຂອງ ພວກທ່ານເອງ, ແລະ ຄຸ້ນເຄີຍກັບທຸກຄົນ ແລະ ແຈກຢາຍ ເຂົ້າ ຂອງ ຂອງພວກທ່ານ, ເພື່ອ ພວກເຂົາຈະໄດ້ຮັ່ງມີເໝືອນດັ່ງ ພວກທ່ານ.

Think of your brethren like unto yourselves, and be familiar with all and free with your substance, that they may be rich like unto you.

ແຕ່ວ່າກ່ອນທີ່ພວກທ່ານຈະຊອກຫາ ຄວາມຮັ່ງມີນັ້ນ, ໃຫ້ ພວກທ່ານຊອກຫາ ອານາຈັກຂອງພຣະເຈົ້າກ່ອນ.

But before ye seek for riches, seek ye for the kingdom of God.

ແລະ ຫລັງຈາກພວກທ່ານໄດ້ຮັບຄວາມຫວັງໃນພຣະຄຣິດ ແລ້ວ ພວກທ່ານຈະໄດ້ຮັບຄວາມຮັ່ງມີ, ຖ້າຫາກພວກທ່ານ ສະແຫວງຫາມັນ, ແລະ ພວກທ່ານຊອກຫາມັນດ້ວຍ ເຈດຕະນາເພື່ອ ສ້າງຄວາມດີ—ເພື່ອມີເຄື່ອງນຸ່ງຫົ່ມໃຫ້ແກ່ຄົນ ທີ່ເປືອຍເປົ່າ, ແລະ ລ້ຽງຄົນອຶດຫິວ, ແລະ ປົດປ່ອຍຊະເລີຍໃຫ້ ເປັນອິດສະລະ ແລະ ຊ່ວຍບັນເທົາທຸກໃຫ້ຄົນເຈັບປ່ວຍ ແລະ ຄົນທີ່ເປັນທຸກ.

And after ye have obtained a hope in Christ ye shall obtain riches, if ye seek them; and ye will seek them for the intent to do good—to clothe the naked, and to feed the hungry, and to liberate the captive, and administer relief to the sick and the afflicted.

ແລະ ບັດນີ້ພີ່ນ້ອງຂອງຂ້າພະເຈົ້າ, ຂ້າພະເຈົ້າໄດ້ເວົ້າກັບ ພວກທ່ານແລ້ວກ່ຽວກັບຄວາມທະນົງໃຈນັ້ນ; ແລະ ຄົນໃນ ຈຳນວນພວກທ່ານທີ່ເຮັດໃຫ້ເພື່ອນບ້ານຂອງພວກທ່ານ ເປັນທຸກ ແລະ ຂົ່ມເຫັງເຂົາ ເພາະຄວາມອວດດີໃນໃຈຂອງພວກ ທ່ານ, ຄ້ອຍສິ່ງທີ່ພຣະເຈົ້າປະທານໃຫ້ແກ່ພວກທ່ານ, ແລ້ວ ພວກທ່ານຈະເວົ້າວ່າແນວໃດ?

And now, my brethren, I have spoken unto you concerning pride; and those of you which have afflicted your neighbor, and persecuted him because ye were proud in your hearts, of the things which God hath given you, what say ye of it?

ພວກທ່ານບໍ່ຄິດບໍວ່າ ເລື່ອງເຫລົ່ານີ້ເປັນໜ້າກຽດຊັງສຳລັບ ພຣະອົງຜູ້ສ້າງເນື້ອໜັງທັງປວງ? ແລະ ໃນສາຍພຣະເນດຂອງ ພຣະອົງແລ້ວ ຄົນຜູ້ໜຶ່ງກໍມີຄຸນຄ່າຊ່ຳກັບຄົນອີກຜູ້ໜຶ່ງ. ແລະ ເນື້ອໜັງທັງໝົດນັ້ນມາຈາກຂີ້ຝຸ່ນ; ແລະ ພຣະອົງໄດ້ສ້າງພວກ ເຂົາເພື່ອຈຸດມຸ້ງໝາຍອັນດຽວກັນ, ວ່າພວກເຂົາຄວນຮັກສາ ພຣະບັນຍັດຂອງພຣະອົງ ແລະ ຖວາຍບາລະມີແດ່ພຣະອົງ ຕະຫລອດໄປ.

Do ye not suppose that such things are abominable unto him who created all flesh? And the one being is as precious in his sight as the other. And all flesh is of the dust; and for the selfsame end hath he created them, that they should keep his commandments and glorify him forever.

ແລະ ບັດນີ້ຂ້າພະເຈົ້າຂໍຈົບການເວົ້າກັບພວກທ່ານກ່ຽວກັບ ຄວາມທະນົງໃຈນີ້. ແລະ ຖ້າວ່າຂ້າພະເຈົ້າບໍ່ຈຳເປັນຈະເວົ້າ ກ່ຽວກັບຄວາມຜິດອັນຫຍາບຄາຍນີ້, ໃຈຂອງຂ້າພະເຈົ້າຄົງ ປິຕິຍິນດີຢ່າງຍິ່ງເພາະພວກທ່ານ.

And now I make an end of speaking unto you concerning this pride. And were it not that I must speak unto you concerning a grosser crime, my heart would rejoice exceedingly because of you.

ຄ.ນ ແຕ່ວ່າພຣະຄຳຂອງພຣະເຈົ້າເຮັດໃຫ້ຂ້າພະເຈົ້າຕ້ອງໜັກໃຈ ເພາະຄວາມຜິດອັນຫຍາບຊ້າຂອງພວກທ່ານ. ຈົ່ງເບິ່ງ, ພຣະ ຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ຜູ້ຄົນພວກນີ້ເລີ່ມສ້າງຄວາມຊົ່ວຮ້າຍ; ພວກເຂົາບໍ່ເຂົ້າໃຈພຣະຄຳພີ, ແລະ ພະຍາຍາມຊອກຫາຂໍ້ ແກ້ຕົວໃນການທຳການໂສເພນີ, ເພາະເລື່ອງນີ້ໄດ້ບັນທຶກໄວ້ ກ່ຽວກັບກະສັດດາວິດ ແລະ ໂຊໂລໂມນລູກຊາຍຂອງເຂົາ.

ຄ.ສ ພຣະຜູ້ເປັນເຈົ້າໄດ້ກ່າວວ່າ, ຈົ່ງເບິ່ງ, ດາວິດ ແລະ ໂຊໂລໂມນ ມີ ເມຍກັບສາວໃຊ້ຢ່າງຫລວງຫລາຍ, ຊຶ່ງເລື່ອງນີ້ເປັນໜ້າ ກຽດຊັງຕໍ່ໜ້າເຮົາ.

ຄ.ສ.ນ ດັ່ງນັ້ນ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ເຮົາພາຜູ້ຄົນພວກນີ້ ອອກຈາກແຜ່ນດິນເຢຣູຊາເລັມດ້ວຍອຳນາດຂອງແຂນເຮົາເອງ, ເພື່ອເຮົາຈະໄດ້ຍົກກິ່ງງ່າ ອັນຊອບທຳຂຶ້ນຈາກໜໍ່ແໜງຂອງ ໂຢເຊັບໄວ້ໃຫ້ເຮົາ.

ຄ.ສ.ເອ ດັ່ງນັ້ນ, ເຮົາອົງພຣະຜູ້ເປັນເຈົ້າຈະບໍ່ຍອມໃຫ້ຜູ້ຄົນພວກນີ້ ໄດ້ຮັບຄວາມທຸກທໍລະມານເໝືອນດັ່ງຄົນໃນສະໄໝກ່ອນ.

ຄ.ສ.ສ ດັ່ງນັ້ນ, ພີ່ນ້ອງຂອງຂ້າພະເຈົ້າ, ຈົ່ງຟັງ, ແລະ ຈົ່ງເຊື່ອຟັງ ພຣະຄຳຂອງພຣະຜູ້ເປັນເຈົ້າວ່າ: ຈະບໍ່ມີຜູ້ຊາຍຄົນໃດໃນບັນດາ ພວກທ່ານມີເມຍຫລາຍກວ່າ ໜຶ່ງຄົນ; ແລະ ມີເມຍນ້ອຍອີກບໍ່ ໄດ້;

ຄ.ສ.ຄ ເພາະເຮົາ, ອົງພຣະຜູ້ເປັນເຈົ້າ, ຊື່ນຊົມໃນ ພົມມະຈັນຂອງ ຜູ້ຍິງ. ແລະ ສ່ວນການໂສເພນີນັ້ນ ເປັນສິ່ງທີ່ໜ້າກຽດຊັງຕໍ່ໜ້າ ເຮົາ; ຈອມໂຍທາໄດ້ກ່າວດັ່ງນີ້.

ຄ.ສ.ເອ ດັ່ງນັ້ນ, ຜູ້ຄົນພວກນີ້ຈະຕ້ອງຮັກສາບັນຍັດຂອງເຮົາ, ຈອມ ໂຍທາໄດ້ກ່າວດັ່ງນີ້, ຖ້າບໍ່ດັ່ງນັ້ນແຜ່ນດິນຈະຖືກ ສາບແຊ່ງ ສຳລັບພວກເຂົາ.

ມ.ນ ຈອມໂຍທາໄດ້ກ່າວວ່າ, ຖ້າເຮົາຢາກຈະລ້ຽງດູ ລູກຫລານໄວ້ ເພື່ອເຮົາ ແລ້ວເຮົາຈະບັນຊາຜູ້ຄົນຂອງເຮົາເອງ; ບໍ່ດັ່ງນັ້ນພວກ ເຂົາຈະເຊື່ອຟັງເລື່ອງເຫລົ່ານີ້.

ມ.ນ.ນ ເພາະຈົ່ງເບິ່ງ, ເຮົາພຣະຜູ້ເປັນເຈົ້າໄດ້ເຫັນຄວາມເສົ້າ ສະຫລົດໃຈ, ແລະ ໄດ້ຍິນສຽງທຸກໂສກຂອງລູກສາວຂອງຜູ້ຄົນ ຂອງເຮົາໃນແຜ່ນດິນເຢຣູຊາເລັມ, ແທ້ຈິງແລ້ວ, ໃນທົ່ວ ແຜ່ນດິນຂອງຜູ້ຄົນຂອງເຮົາ, ເພາະຄວາມຊົ່ວຮ້າຍ ແລະ ຄວາມ ໜ້າກຽດຊັງຂອງຜົວຂອງພວກເຂົາ.

ມ.ສ ແລະ ຈອມໂຍທາໄດ້ກ່າວໄວ້ວ່າ ເຮົາຈະບໍ່ຍອມໃຫ້ສຽງ ຮ້ອງໄຫ້ຂອງລູກສາວທີ່ດີຂອງຜູ້ຄົນພວກນີ້ຊຶ່ງເຮົາໄດ້ນຳອອກ ມາຈາກແຜ່ນດິນເຢຣູຊາເລັມຂຶ້ນມາເຖິງເຮົາເພື່ອຟ້ອງຜົວຂອງ ພວກເຂົາ, ຈອມໂຍທາໄດ້ກ່າວ.

But the word of God burdens me because of your grosser crimes. For behold, thus saith the Lord: This people begin to wax in iniquity; they understand not the scriptures, for they seek to excuse themselves in committing whoredoms, because of the things which were written concerning David, and Solomon his son.

Behold, David and Solomon truly had many wives and concubines, which thing was abominable before me, saith the Lord.

Wherefore, thus saith the Lord, I have led this people forth out of the land of Jerusalem, by the power of mine arm, that I might raise up unto me a righteous branch from the fruit of the loins of Joseph.

Wherefore, I the Lord God will not suffer that this people shall do like unto them of old.

Wherefore, my brethren, hear me, and hearken to the word of the Lord: For there shall not any man among you have save it be one wife; and concubines he shall have none;

For I, the Lord God, delight in the chastity of women. And whoredoms are an abomination before me; thus saith the Lord of Hosts.

Wherefore, this people shall keep my commandments, saith the Lord of Hosts, or cursed be the land for their sakes.

For if I will, saith the Lord of Hosts, raise up seed unto me, I will command my people; otherwise they shall hearken unto these things.

For behold, I, the Lord, have seen the sorrow, and heard the mourning of the daughters of my people in the land of Jerusalem, yea, and in all the lands of my people, because of the wickedness and abominations of their husbands.

And I will not suffer, saith the Lord of Hosts, that the cries of the fair daughters of this people, which I have led out of the land of Jerusalem, shall come up unto me against the men of my people, saith the Lord of Hosts.

ນ້ນ ເພາະພວກເຂົາຈະບໍ່ນຳເອົາລູກສາວຂອງຜູ້ຄົນຂອງເຮົາໄປ ເປັນຊະເລີຍ ເພາະຄວາມອ່ອນໂຍນຂອງນາງ ຖ້າຫາກເປັນ ດັ່ງນັ້ນ, ເຮົາຈະມາຢ້ຽມຢາມພວກເຂົາດ້ວຍການສາບແຊ່ງຢ່າງ ສາຫັດ, ຈົນເຖິງການທຳລາຍ; ເພື່ອພວກເຂົາຈະບໍ່ທຳ ການ ໂສເພນີເໝືອນດັ່ງຄົນໃນສະໄໝກ່ອນ, ຈອມໂຍທາໄດ້ກ່າວ.

ນ ແ ລະ ບັ ດ ນີ້ ຈົ່ ງ ເບິ່ ງ, ພີ່ ນ້ ອ ງ ຂ ອ ງ ຂ້ າ ພ ະ ເ ຈົ້ າ, ພ ວ ກ ທ່ ານ ຮູ້ ແ ລ້ ວ ວ່ າ ພ ຣ ະ ບັ ນ ຍັ ດ ເ ຫ ລ່ ານ ີ້ ໄ ດ້ ປ ະ ທ ານ ໃ ຫ້ ບ ິ ດ າ ຂ ອ ງ ພ ວ ກ ເ ຮົ າ ລ ີ ໄ ຮ; ດັ ່ ງ ນ ັ ້ ນ ພ ວ ກ ທ ່ ານ ໄ ດ ້ ຮ ູ ້ ມ າ ແ ລ ້ ວ; ແ ລ ະ ພ ວ ກ ທ ່ ານ ໄ ດ ້ ເ ຂ ົ ້ າ ມ າ ສ ູ ່ ການ ກ່ າ ວ ໂ ທ ດ ອ ັ ນ ໃ ຫ ຍ່ ຫ ລ ວ ງ ເ ພ າ ະ ສ ິ ່ ງ ເ ຫ ລ່ ານ ີ້ ທ ີ່ ພ ວ ກ ທ ່ ານ ບ ໍ່ ຄ ວ ນ ເ ຮ ັ ດ ເ ລ ີ ຍ.

ນ ຈ ົ ່ ງ ເ ບ ິ ່ ງ, ພ ວ ກ ທ ່ ານ ເ ຮ ັ ດ ຄ ວ າ ມ ຊ ົ ່ ວ ຮ ້ າ ຍ ອ ັ ນ ໃ ຫ ຍ່ ຫ ລ ວ ງ ກ ວ່ າ ຊ າ ວ ເ ລ ມ ັ ນ ພ ີ່ ນ ້ ອ ງ ຂ ອ ງ ພ ວ ກ ເ ຮ ົ າ. ພ ວ ກ ທ ່ ານ ໄ ດ ້ ເ ຮ ັ ດ ໃ ຫ ້ ໃ ຈ ອ ັ ນ ອ ່ ອ ນ ໂ ຍ ນ ຂ ອ ງ ເ ມ ຍ ຂ ອ ງ ພ ວ ກ ທ ່ ານ ເ ຈ ັ ບ ຊ ້ ຳ, ແ ລ ະ ເ ຮ ັ ດ ໃ ຫ ້ ລ ູ ກ ຫ ລ ານ ຂ ອ ງ ພ ວ ກ ທ ່ ານ ໝ ົ ດ ຄ ວ າ ມ ໝ ັ ້ ນ ໃ ຈ ໃ ນ ພ ວ ກ ທ ່ ານ ຍ ້ ອ ນ ຕ ົ ວ ຢ່ າ ງ ອ ັ ນ ຊ ົ ່ ວ ຮ ້ າ ຍ ທ ີ່ ພ ວ ກ ທ ່ ານ ໄ ດ ້ ເ ຮ ັ ດ ຕ ໍ່ ໜ ້ າ ພ ວ ກ ເ ຂ ົ າ. ແ ລ ະ ສ ຽ ງ ສ ະ ອ ື້ ນ ຂ ອ ງ ໃ ຈ ຂ ອ ງ ພ ວ ກ ເ ຂ ົ າ ຂ ຶ້ ນ ໄ ປ ເ ຖ ິ ງ ພ ຣ ະ ເ ຈ ົ້ າ ເ ພ ື່ ອ ຟ້ ອ ງ ພ ວ ກ ທ ່ ານ. ແ ລ ະ ເ ພ າ ະ ຄ ວ າ ມ ເ ຄ ັ ່ ງ ຄ ັ ດ ແ ຫ ່ ງ ພ ຣ ະ ຄ ຳ ຂ ອ ງ ພ ຣ ະ ເ ຈ ົ້ າ ຊ ຶ່ ງ ມ າ ລ ົ ງ ທ ັ ນ ພ ວ ກ ທ ່ ານ, ໃ ຈ ຫ ລ າ ຍ ຄ ວ ງ ຈ ຶ ່ ງ ຕ າ ຍ ໂ ດ ຍ ການ ຖ ືກ ສ ຽ ບ ແ ທ ງ ເ ປ ັ ນ ແ ຜ ເ ລ ິ ກ.

For they shall not lead away captive the daughters of my people because of their tenderness, save I shall visit them with a sore curse, even unto destruction; for they shall not commit whoredoms, like unto them of old, saith the Lord of Hosts.

And now behold, my brethren, ye know that these commandments were given to our father, Lehi; wherefore, ye have known them before; and ye have come unto great condemnation; for ye have done these things which ye ought not to have done.

Behold, ye have done greater iniquities than the Lamanites, our brethren. Ye have broken the hearts of your tender wives, and lost the confidence of your children, because of your bad examples before them; and the sobbings of their hearts ascend up to God against you. And because of the strictness of the word of God, which cometh down against you, many hearts died, pierced with deep wounds.

ຢາໂຄບ ມ

Jacob 3

ແຕ່ຈົ່ງເບິ່ງ ຂ້າພະເຈົ້າຢາໂຄບຈະເວົ້າກັບພວກທ່ານຜູ້ທີ່ມີໃຈ ບໍລິສຸດ. ຈົ່ງຫວັງໃນພຣະເຈົ້າດ້ວຍຈິດໃຈໝັ້ນຄົງ, ແລະ ອະທິຖານເຖິງພຣະອົງດ້ວຍສັດທາຢ່າງຫລວງຫລາຍ, ແລະ ພຣະອົງຈະປອບໂຍນພວກທ່ານໃນຄວາມທຸກຂອງພວກທ່ານ, ແລະ ພຣະອົງຈະວິງວອນແທນພວກທ່ານ, ແລະ ຈະສົ່ງຄວາມ ຍຸດຕິທຳລົງມາເທິງຄົນທີ່ສະແຫວງຫາຄວາມພິນາດໃຫ້ພວກ ທ່ານ.

But behold, I, Jacob, would speak unto you that are pure in heart. Look unto God with firmness of mind, and pray unto him with exceeding faith, and he will console you in your afflictions, and he will plead your cause, and send down justice upon those who seek your destruction.

ໂອ້ ທ່ານທັງຫລາຍຜູ້ທີ່ມີໃຈບໍລິສຸດ, ຈົ່ງເງີຍໜ້າຂຶ້ນ ແລະ ຮັບພຣະຄຳອັນໜ້າພໍໃຈຂອງພຣະເຈົ້າ, ແລະ ຈົ່ງຊື່ນຊົມຢູ່ດ້ວຍ ຄວາມຮັກຂອງພຣະອົງ; ພວກທ່ານຈະເຮັດໄດ້ຖ້າຫາກຈິດໃຈ ຂອງພວກທ່ານ ແນ່ວແນ່ຕະຫລອດໄປ.

O all ye that are pure in heart, lift up your heads and receive the pleasing word of God, and feast upon his love; for ye may, if your minds are firm, forever.

ແຕ່ວິບັດ, ວິບັດແກ່ຜູ້ທີ່ບໍ່ມີໃຈບໍລິສຸດ ແລະ ທີ່ ສົກກະປົກຕໍ່ ພຣະພັກຂອງພຣະເຈົ້າໃນມື້ນີ້; ເພາະຖ້າຫາກພວກທ່ານບໍ່ກັບ ໃຈ ແຜ່ນດິນຈະຖືກສາບແຊ່ງເພື່ອເຫັນແກ່ພວກທ່ານ; ແລະ ຊາວເລມັນຊຶ່ງບໍ່ສົກກະປົກເທົ່າກັບພວກທ່ານ, ແຕ່ປານນັ້ນ ພວກເຂົາຍັງຖືກ ສາບແຊ່ງດ້ວຍຄຳສາບແຊ່ງຢ່າງສາຫັດ, ຈະ ຂ້ຽນຕີພວກທ່ານຈົນເຖິງຄວາມພິນາດ.

But, wo, wo, unto you that are not pure in heart, that are filthy this day before God; for except ye repent the land is cursed for your sakes; and the Lamanites, which are not filthy like unto you, nevertheless they are cursed with a sore cursing, shall scourge you even unto destruction.

ແລະ ເວລາຈະມາເຖິງຢ່າງວ່ອງໄວ ຖ້າຫາກພວກທ່ານບໍ່ກັບ ໃຈ ພວກເຂົາຈະເປັນເຈົ້າຂອງແຜ່ນດິນຊຶ່ງເປັນມູນມໍລະດົກ ຂອງພວກທ່ານ, ແລະ ອົງພຣະຜູ້ເປັນເຈົ້າຈະ ນຳເອົາຄົນທີ່ ຊອບທຳອອກຈາກບັນດາພວກທ່ານ.

And the time speedily cometh, that except ye repent they shall possess the land of your inheritance, and the Lord God will lead away the righteous out from among you.

ຈົ່ງເບິ່ງ, ຊາວເລມັນພີ່ນ້ອງຂອງພວກທ່ານ, ຜູ້ທີ່ພວກທ່ານ ກຽດຊັງ ເພາະຄວາມສົກກະປົກຂອງພວກເຂົາ ແລະ ການ ສາບແຊ່ງຊຶ່ງເກີດຂຶ້ນກັບຜິວໜັງຂອງພວກເຂົາກັບມາເປັນຜູ້ ຊອບທຳກວ່າພວກທ່ານ; ເພາະວ່າພວກເຂົາ ບໍ່ລືມພຣະບັນຍັດ ຂອງພຣະຜູ້ເປັນເຈົ້າ, ຊຶ່ງໄດ້ປະທານໃຫ້ບິດາຂອງພວກເຮົາວ່າ —ພວກເຂົາຈະຕ້ອງມີເມຍແຕ່ຄົນດຽວເທົ່ານັ້ນ, ແລະ ບໍ່ໃຫ້ມີ ເມຍນ້ອຍ ແລະ ບໍ່ໃຫ້ມີການໂສເພນີຢູ່ໃນບັນດາພວກເຂົາ.

Behold, the Lamanites your brethren, whom ye hate because of their filthiness and the cursing which hath come upon their skins, are more righteous than you; for they have not forgotten the commandment of the Lord, which was given unto our father—that they should have save it were one wife, and concubines they should have none, and there should not be whoredoms committed among them.

ແລະ ບັດນີ້, ພວກເຂົາຍຶດຖືທີ່ຈະຮັກສາພຣະບັນຍັດນີ້; ດັ່ງນັ້ນຍ້ອນການຍຶດຖືພຣະບັນຍັດນີ້, ອົງພຣະຜູ້ເປັນເຈົ້າຈົ່ງບໍ່ ທຳລາຍພວກເຂົາ, ແຕ່ພຣະອົງຈະ ເມດຕາພວກເຂົາ; ແລະ ມື້ ໜຶ່ງພວກເຂົາຈະກາຍເປັນຜູ້ຄົນທີ່ໄດ້ຮັບພອນ.

And now, this commandment they observe to keep; wherefore, because of this observance, in keeping this commandment, the Lord God will not destroy them, but will be merciful unto them; and one day they shall become a blessed people.

ຈົ່ງເບິ່ງ, ຜົວຂອງພວກເຂົາ ຮັກເມຍຂອງພວກເຂົາ, ແລະ ເມຍຂອງພວກເຂົາກໍຮັກຜົວຂອງພວກເຂົາ; ແລະ ຜົວເມຍກໍ ຮັກລູກໆ; ແລະ ສ່ວນຄວາມບໍ່ເຊື່ອຖື ແລະ ຄວາມກຽດຊັງຂອງ ພວກເຂົາທີ່ມີຕໍ່ພວກທ່ານກໍເປັນຍ້ອນຄວາມຊົ່ວຮ້າຍຂອງ ບັນພະບຸລຸດຂອງພວກເຂົາ; ດັ່ງນັ້ນໃນສາຍພຣະເນດຂອງ ພຣະຜູ້ສ້າງຍິ່ງໃຫຍ່ຂອງພວກທ່ານແລ້ວ, ພວກທ່ານດີກວ່າ ພວກເຂົາຊໍ່າໃດ?

Behold, their husbands love their wives, and their wives love their husbands; and their husbands and their wives love their children; and their unbelief and their hatred towards you is because of the iniquity of their fathers; wherefore, how much better are you than they, in the sight of your great Creator?

ຖ ໂອ້ ພີ່ນ້ອງຂອງຂ້າພະເຈົ້າເອີຍ, ຖ້າຫາກພວກທ່ານບໍ່ກັບໃຈ ຈາກບາບຂອງພວກທ່ານແລ້ວ ຂ້າພະເຈົ້າຢ້ານວ່າຜິວໜັງຂອງ ພວກເຂົາຈະຂາວກວ່າຜິວໜັງຂອງພວກທ່ານ, ເມື່ອພວກ ທ່ານຖືກນຳໄປຢູ່ຕໍ່ໜ້າພຣະທີ່ນັ່ງຂອງພຣະເຈົ້າພ້ອມກັນກັບ ພວກເຂົາ.

O my brethren, I fear that unless ye shall repent of your sins that their skins will be whiter than yours, when ye shall be brought with them before the throne of God.

ດ ດັ່ງນັ້ນ, ຂ້າພະເຈົ້າຈະໃຫ້ພຣະບັນຍັດຂໍ້ໜຶ່ງ ຊຶ່ງເປັນພຣະຄຳ ຂອງພຣະເຈົ້າໄວ້ກັບພວກທ່ານວ່າ, ຢ່າໄດ້ໝິ່ນປະໝາດພວກ ເຂົາອີກຕໍ່ໄປເພາະຄວາມດຳຂອງຜິວໜັງຂອງພວກເຂົາ; ພ້ອມ ທັງຢ່າໄດ້ໝິ່ນປະໝາດເພາະຄວາມສົກກະປົກຂອງພວກເຂົາ; ຈົ່ງຄຳນຶງເຖິງຄວາມສົກກະປົກຂອງຕົນເອງ, ແລະ ຈົ່ງຈຳໄວ້ວ່າ ຄວາມສົກກະປົກຂອງພວກເຂົານັ້ນແມ່ນມາຈາກບັນພະບຸລຸດ ຂອງພວກເຂົາ.

Wherefore, a commandment I give unto you, which is the word of God, that ye revile no more against them because of the darkness of their skins; neither shall ye revile against them because of their filthiness; but ye shall remember your own filthiness, and remember that their filthiness came because of their fathers.

ດ ດັ່ງນັ້ນ, ພວກທ່ານຈົ່ງຄິດເຖິງ ລູກຫລານຂອງພວກທ່ານ ວ່າ, ພວກທ່ານໄດ້ເຮັດໃຫ້ໃຈຂອງພວກເຂົາໂສກເສົ້າຊໍ່ຳໃດ ເພາະຕົວຢ່າງທີ່ພວກທ່ານເຮັດໄວ້ຕໍ່ໜ້າພວກເຂົາ, ແລະ ຈົ່ງຈຳ ໄວ້ອີກວ່າເພາະຄວາມສົກກະປົກຂອງພວກທ່ານ, ພວກທ່ານ ຈະນຳລູກຫລານຂອງພວກທ່ານໄປສູ່ຄວາມພິນາດ, ແລະ ບາບ ຂອງພວກເຂົາຈະກອງຢູ່ຫົວຂອງພວກທ່ານໃນວັນສຸດທ້າຍ.

Wherefore, ye shall remember your children, how that ye have grieved their hearts because of the example that ye have set before them; and also, remember that ye may, because of your filthiness, bring your children unto destruction, and their sins be heaped upon your heads at the last day.

ດ ໂອ້ ພີ່ນ້ອງຂອງຂ້າພະເຈົ້າເອີຍ, ຈົ່ງເຊື່ອຟັງຄຳເວົ້າຂອງ ຂ້າພະເຈົ້າເຖີດ; ຈົ່ງປຸກຄວາມສາມາດຂອງຈິດວິນຍານຂອງ ພວກທ່ານໃຫ້ຕື່ນຂຶ້ນ; ຈົ່ງສັ່ນຕົວຂອງພວກທ່ານເພື່ອພວກ ທ່ານຈະໄດ້ ຕື່ນຈາກການນອນຫລັບແຫ່ງຄວາມຕາຍ, ແລະ ເຮັດໃຫ້ຕົວຫລຸດພົ້ນອອກຈາກຄວາມເຈັບປວດແຫ່ງ ນະລົກ ເພື່ອພວກທ່ານຈະບໍ່ກັບມາເປັນ ບໍລິວານຂອງມານທີ່ຖືກເຂົ້າ ໄປໃນທະເລໄຟ ແລະ ມາດ ຊຶ່ງເປັນ ຄວາມຕາຍເທື່ອທີສອງ.

O my brethren, hearken unto my words; arouse the faculties of your souls; shake yourselves that ye may awake from the slumber of death; and loose yourselves from the pains of hell that ye may not become angels to the devil, to be cast into that lake of fire and brimstone which is the second death.

ດ ແລະ ບັດນີ້ຂ້າພະເຈົ້າຢາໂຄບໄດ້ເວົ້າກັບຜູ້ຄົນຂອງນີໄຟ ຫລາຍເລື່ອງ, ໂດຍຕັກເຕືອນພວກເຂົາບໍ່ໃຫ້ ລ່ວງປະເວນີ ແລະ ກິເລດຕັນຫາ ແລະ ບາບທຸກຢ່າງ, ໂດຍໄດ້ບອກພວກເຂົາເຖິງ ຜົນສະທ້ອນອັນເປັນຕາຢ້ານທີ່ຈະເກີດຂຶ້ນຈາກມັນ.

And now I, Jacob, spake many more things unto the people of Nephi, warning them against fornication and lasciviousness, and every kind of sin, telling them the awful consequences of them.

ດ ແລະ ຂ້າພະເຈົ້າບັນທຶກໄວ້ພຽງໜຶ່ງສ່ວນຮ້ອຍຂອງການ ປະຕິບັດຕົວຈິງຂອງຜູ້ຄົນພວກນີ້, ຊຶ່ງໃນຕອນນີ້ ກຳລັງເລີ່ມ ຂະຫຍາຍຕົວຂຶ້ນ ຊຶ່ງບໍ່ສາມາດບັນທຶກໄວ້ໃນແຜ່ນຈາລຶກ ເຫລົ່າ ນີ້; ແຕ່ວ່າການປະຕິບັດຕົວຈິງຫລາຍຢ່າງ, ແລະ ເລື່ອງສົງຄາມ ຂອງພວກເຂົາ, ແລະ ເລື່ອງການຂັດແຍ້ງຂອງພວກເຂົາ, ແລະ ເລື່ອງການສືບຄອງລາຊາບັນລັງຂອງກະສັດຂອງພວກເຂົາໄດ້ ບັນທຶກໄວ້ໃນແຜ່ນຈາລຶກອີກເຫລັ້ມໜຶ່ງຊຶ່ງໃຫຍ່ກວ່ານີ້.

And a hundredth part of the proceedings of this people, which now began to be numerous, cannot be written upon these plates; but many of their proceedings are written upon the larger plates, and their wars, and their contentions, and the reigns of their kings.

ດ ແຜ່ນຈາລຶກເຫລົ່ານີ້ໄດ້ຖືກເອີ້ນວ່າແຜ່ນຈາລຶກຂອງຢາໂຄບ, ແລະ ມັນເຮັດຂຶ້ນດ້ວຍມືຂອງນີໄຟ. ແລະ ຂ້າພະເຈົ້າຈົບການ ເວົ້າຂໍ້ຄວາມເຫລົ່ານີ້.

These plates are called the plates of Jacob, and they were made by the hand of Nephi. And I make an end of speaking these words.

ຢາໂຄບ ๔

Jacob 4

๑ ບັດນີ້ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້າຢາໂຄບຊຶ່ງ ໄດ້ປະຕິບັດສາດສະໜາກິດຫລາຍຢ່າງຕໍ່ຜູ້ຄົນຂອງຂ້າພະເຈົ້າ ດ້ວຍຄຳເວົ້າ, (ແລະ ຂ້າພະເຈົ້າບໍ່ສາມາດບັນທຶກຂໍ້ຄວາມໄວ້ ໝົດນອກຈາກພຽງເລັກໜ້ອຍເທົ່ານັ້ນ ເພາະວ່າການຄວັດ ຕົວໜັງສືໄວ້ໃນແຜ່ນຈາລຶກນັ້ນແມ່ນຍາກຫລາຍ) ແລະ ພວກ ເຮົາຮູ້ວ່າ ສິ່ງທີ່ພວກເຮົາບັນທຶກໄວ້ໃນແຜ່ນຈາລຶກນັ້ນຕ້ອງຍັງ ຢູ່;

Now behold, it came to pass that I, Jacob, having ministered much unto my people in word, (and I cannot write but a little of my words, because of the difficulty of engraving our words upon plates) and we know that the things which we write upon plates must remain;

๒ ແຕ່ເລື່ອງຫຍັງກໍຕາມທີ່ພວກເຮົາບັນທຶກໄວ້ໃນສິ່ງອື່ນຈະ ຕ້ອງຕົກເຮ່ຍ ແລະ ລຶບເລືອນໄປນອກຈາກຈະບັນທຶກໄວ້ໃນ ແຜ່ນຈາລຶກເທົ່ານັ້ນ, ແຕ່ພວກເຮົາສາມາດບັນທຶກຂໍ້ຄວາມໄວ້ ໃນແຜ່ນຈາລຶກພຽງເລັກໜ້ອຍ ເພື່ອຈະໃຫ້ລະດັບຄວາມຮູ້ເລັກ ໜ້ອຍແກ່ລູກຫລານ ແລະ ພີ່ນ້ອງທີ່ຮັກແພງຂອງພວກເຮົາ ກ່ຽວກັບພວກເຮົາ, ຫລື ກ່ຽວກັບບັນພະບຸລຸດຂອງພວກເຂົາ —

But whatsoever things we write upon anything save it be upon plates must perish and vanish away; but we can write a few words upon plates, which will give our children, and also our beloved brethren, a small degree of knowledge concerning us, or concerning their fathers—

๓ ບັດນີ້ພວກເຮົາປິຕິຍິນດີໃນເລື່ອງນີ້; ແລະ ພວກເຮົາອອກ ແຮງງານຢ່າງພາກພຽນທີ່ຈະຄວັດຂໍ້ຄວາມນີ້ໄວ້ໃນແຜ່ນ ຈາລຶກໂດຍຫວັງວ່າ ພີ່ນ້ອງທີ່ຮັກແພງຂອງພວກເຮົາ ແລະ ລູກ ຫລານຂອງພວກເຮົາ ຈະຮັບມັນດ້ວຍໃຈທີ່ຮູ້ບຸນຄຸນ, ແລະ ອ່ານ ເພື່ອຮຽນຮູ້ດ້ວຍຄວາມສຸກ ແລະ ບໍ່ແມ່ນດ້ວຍຄວາມເສົ້າ ສະຫລົດໃຈ, ແລະ ບໍ່ແມ່ນດ້ວຍຄວາມໝິ່ນປະໝາດບິດາ ມານດາຜູ້ທຳອິດຂອງພວກເຮົາ.

Now in this thing we do rejoice; and we labor diligently to engraven these words upon plates, hoping that our beloved brethren and our children will receive them with thankful hearts, and look upon them that they may learn with joy and not with sorrow, neither with contempt, concerning their first parents.

๔ ເພາະເພື່ອເຈດຕະນານີ້ ພວກເຮົາຈຶ່ງໄດ້ບັນທຶກເລື່ອງເຫລົ່າ ນີ້ໄວ້ເພື່ອພວກລູກຫລານຈະໄດ້ຮູ້ວ່າພວກເຮົາ ຮູ້ຈັກພຣະຄຣິດ ມາກ່ອນ; ແລະ ພວກເຮົາມີຄວາມຫວັງໃນລັດສະໝີພາບຂອງ ພຣະອົງມາໄດ້ຫລາຍຮ້ອຍປີແລ້ວ ກ່ອນທີ່ພຣະອົງຈະສະເດັດ ມາ ແລະ ບໍ່ມີແຕ່ພວກເຮົາເທົ່ານັ້ນທີ່ມີຄວາມຫວັງໃນລັດສະໝີ ພາບຂອງພຣະອົງ, ແຕ່ ສາດສະດາຜູ້ສັກສິດທັງຫລາຍຊຶ່ງຢູ່ ມາກ່ອນພວກເຮົາກໍມີຄວາມຫວັງເຊັ່ນດຽວກັນ.

For, for this intent have we written these things, that they may know that we knew of Christ, and we had a hope of his glory many hundred years before his coming; and not only we ourselves had a hope of his glory, but also all the holy prophets which were before us.

๕ ຈົ່ງເບິ່ງ, ພວກເພີ່ນເຊື່ອໃນພຣະຄຣິດ ແລະ ນະມັດສະການ ພຣະບິດາໃນພຣະນາມຂອງພຣະອົງ ແລະ ພວກເຮົາກໍ ນະມັດສະການພຣະບິດາໃນພຣະນາມຂອງພຣະອົງເໝືອນ ກັນ; ແລະ ເພື່ອເຈດຕະນານີ້ ພວກເຮົາຈຶ່ງຮັກສາ ກົດຂອງໂມເຊ ໂດຍ ມຸ້ງຫວັງໃຫ້ຈິດວິນຍານຂອງພວກເຮົາໄປຫາພຣະອົງ, ແລະ ດ້ວຍເຫດນີ້ ກົດຈຶ່ງຖືກຕັ້ງໄວ້ໃຫ້ສັກສິດສຳລັບພວກເຮົາ ເພື່ອຄວາມຊອບທຳແມ່ນຄືກັນກັບອັບຣາຮາມຢູ່ໃນຖິ່ນ ແຫ້ງແລ້ງກັນດານທີ່ເຊື່ອຟັງພຣະບັນຊາຂອງພຣະເຈົ້າຈົນວ່າ ໄດ້ຖວາຍອີຊາກລູກຊາຍຂອງເພີ່ນແດ່ພຣະອົງ ຊຶ່ງເປັນ ລັກສະນະດຽວກັນກັບພຣະເຈົ້າຖວາຍ ພຣະບຸດອົງດຽວທີ່ຖື ກຳເນີດຂອງພຣະອົງ.

Behold, they believed in Christ and worshiped the Father in his name, and also we worship the Father in his name. And for this intent we keep the law of Moses, it pointing our souls to him; and for this cause it is sanctified unto us for righteousness, even as it was accounted unto Abraham in the wilderness to be obedient unto the commands of God in offering up his son Isaac, which is a similitude of God and his Only Begotten Son.

ດ ດັ່ງນັ້ນ, ພວກເຮົາຄົ້ນຫາການຂຽນຂອງສາດສະດາ, ແລະ ພວກເຮົາໄດ້ຮັບການເປີດເຜີຍຫລາຍເລື່ອງ ແລະ ວິນຍານແຫ່ງການທຳນາຍ; ແລະ ມີ ພະຍານທັງໝົດນີ້ ພວກເຮົາຈຶ່ງໄດ້ຮັບ ຄວາມຫວັງ, ແລະ ມີສັດທາຢ່າງບໍ່ສະທ້ານຫວັ່ນໄຫວ, ເຖິງ ຂະໜາດທີ່ພວກເຮົາສາມາດ ບັງຄັບບັນຊາໃນ ພຣະນາມຂອງ ພຣະເຢຊູໄດ້ແທ້ໆຈົນວ່າຕົ້ນໄມ້, ຫລື ພູເຂົາ, ຫລື ຄື້ນໃນທະເລ ກໍເຊື່ອຟັງເຮົາແທ້.

ກ ເຖິງຢ່າງໃດກໍຕາມ, ອົງພຣະຜູ້ເປັນເຈົ້າຍັງໄດ້ສະແດງໃຫ້ ພວກເຮົາເຫັນ ຄວາມອ່ອນແອຂອງພວກເຮົາ, ເພື່ອພວກເຮົາ ຈະຮູ້ວ່າເປັນຍ້ອນພຣະຄຸນຂອງພຣະອົງ ແລະ ພຣະເມດຕາ ກະລຸນາອັນຍິ່ງໃຫຍ່ຂອງພຣະອົງທີ່ມີຕໍ່ລູກຫລານມະນຸດ, ພວກເຮົາຈຶ່ງມີອຳນາດເຮັດສິ່ງເຫລົ່ານີ້ໄດ້.

ຂ ຈົ່ງເບິ່ງ, ວຽກງານຂອງພຣະຜູ້ເປັນເຈົ້າຍິ່ງໃຫຍ່ ແລະ ໜ້າ ອັດສະຈັນ. ຄວາມລຶກລັບຂອງພຣະອົງ ບໍ່ສາມາດຢັ່ງເຖິງໄດ້; ແລະ ເປັນໄປບໍ່ໄດ້ທີ່ຄົນຈະພົບເຫັນເສັ້ນທາງຂອງພຣະອົງ ທັງໝົດ. ແລະ ບໍ່ມີຜູ້ໃດຈະ ຮູ້ຈັກ ເສັ້ນທາງຂອງພຣະອົງ ນອກຈາກພຣະອົງຈະເປີດເຜີຍໃຫ້ເຂົາຮູ້; ດັ່ງນັ້ນ, ພີ່ນ້ອງເອີຍ, ຢ່າໄດ້ໝິ່ນປະໝາດການເປີດເຜີຍຂອງພຣະເຈົ້າເລີຍ.

ຄ ເພາະຈົ່ງເບິ່ງ, ໂດຍອຳນາດແຫ່ງ ພຣະຄຳຂອງພຣະອົງ ມະນຸດຈຶ່ງໄດ້ມາສູ່ຜືນແຜ່ນດິນໂລກ, ຊຶ່ງແຜ່ນດິນໂລກໄດ້ຖືກ ສ້າງຂຶ້ນໂດຍອຳນາດແຫ່ງພຣະຄຳຂອງພຣະອົງ. ດັ່ງນັ້ນ, ຖ້າ ຫາກພຣະເຈົ້າສາມາດຮັບສັ່ງ ແລະ ໂລກເປັນຂຶ້ນມາ ແລະ ຮັບ ສັ່ງ ແລະ ມະນຸດຖືກສ້າງຂຶ້ນມາ, ໂອ້ ແລ້ວເປັນຫຍັງພຣະອົງຈະ ບໍ່ສາມາດບັນຊາ ແຜ່ນດິນໂລກ, ຫລື ວຽກງານແຫ່ງພຣະຫັດ ຂອງພຣະອົງເໜືອຜືນແຜ່ນດິນນີ້ໄດ້ຕາມພຣະປະສົງ ແລະ ຄວາມພໍພຣະໄທຂອງພຣະອົງ?

ງ ດັ່ງນັ້ນ, ພີ່ນ້ອງເອີຍ, ຢ່າໄດ້ພະຍາຍາມ ແນະນຳພຣະຜູ້ເປັນ ເຈົ້າ, ແຕ່ໃຫ້ຮັບເອົາຄຳແນະນຳຈາກພຣະຫັດຂອງພຣະອົງ. ເພາະຈົ່ງເບິ່ງ, ຕົວຂອງພວກທ່ານກໍຮູ້ຈັກແລ້ວວ່າ ພຣະອົງໄດ້ ແນະນຳດ້ວຍ ຄວາມສະຫລຽວສະຫລາດ ແລະ ດ້ວຍຄວາມ ຍຸດຕິທຳ ແລະ ດ້ວຍຄວາມເມດຕາອັນຍິ່ງໃຫຍ່ ຕໍ່ວຽກງານ ທັງໝົດຂອງພຣະອົງ.

ຈ ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງເອີຍ, ຈົ່ງຄືນດີກັບພຣະອົງທາງ ການຊົດໃຊ້ຂອງພຣະຄຣິດ ພຣະບຸດອົງດຽວທີ່ຖືກກຳເນີດຂອງ ພຣະອົງ, ແລະ ພວກທ່ານຈະໄດ້ຮັບ ການຟື້ນຄືນຊີວິດໂດຍ ອຳນາດຂອງການຟື້ນຄືນຊີວິດຊຶ່ງຢູ່ໃນພຣະຄຣິດ, ແລະ ຖືກ ນຳມາເປັນ ຜົນທຳອິດຂອງພຣະຄຣິດຕໍ່ພຣະເຈົ້າ, ໂດຍມີ ສັດທາ, ແລະ ໄດ້ຮັບຄວາມຫວັງດີແຫ່ງລັດສະໝີພາບໃນ ພຣະອົງກ່ອນທີ່ພຣະອົງຈະສະແດງພຣະອົງເອງໃຫ້ປະຈັກໃນ ເນື້ອໜັງ.

Wherefore, we search the prophets, and we have many revelations and the spirit of prophecy; and having all these witnesses we obtain a hope, and our faith becometh unshaken, insomuch that we truly can command in the name of Jesus and the very trees obey us, or the mountains, or the waves of the sea.

Nevertheless, the Lord God showeth us our weakness that we may know that it is by his grace, and his great condescensions unto the children of men, that we have power to do these things.

Behold, great and marvelous are the works of the Lord. How unsearchable are the depths of the mysteries of him; and it is impossible that man should find out all his ways. And no man knoweth of his ways save it be revealed unto him; wherefore, brethren, despise not the revelations of God.

For behold, by the power of his word man came upon the face of the earth, which earth was created by the power of his word. Wherefore, if God being able to speak and the world was, and to speak and man was created, O then, why not able to command the earth, or the workmanship of his hands upon the face of it, according to his will and pleasure?

Wherefore, brethren, seek not to counsel the Lord, but to take counsel from his hand. For behold, ye yourselves know that he counseleth in wisdom, and in justice, and in great mercy, over all his works.

Wherefore, beloved brethren, be reconciled unto him through the atonement of Christ, his Only Begotten Son, and ye may obtain a resurrection, according to the power of the resurrection which is in Christ, and be presented as the first-fruits of Christ unto God, having faith, and obtained a good hope of glory in him before he manifesteth himself in the flesh.

ແລະ ບັດນີ້ພີ່ນ້ອງທີ່ຮັກແພງເອີຍ, ຢ່າໄດ້ແປກໃຈເລີຍທີ່ ຂ້າພະເຈົ້າເວົ້າເລື່ອງນີ້ກັບພວກທ່ານ; ເພາະເຫດໃດຂ້າພະເຈົ້າ ຈຶ່ງບໍ່ ເວົ້າເຖິງການຊົດໃຊ້ຂອງພຣະຄຣິດ, ແລະ ມີຄວາມຮູ້ອັນ ສົມບູນກ່ຽວກັບພຣະອົງດັ່ງທີ່ມີຄວາມຮູ້ກ່ຽວກັບການຟື້ນຄືນ ຊີວິດ ແລະ ໂລກທີ່ຈະມາເຖິງ?

And now, beloved, marvel not that I tell you these things; for why not speak of the atonement of Christ, and attain to a perfect knowledge of him, as to attain to the knowledge of a resurrection and the world to come?

ຈົ່ງເບິ່ງ, ພີ່ນ້ອງຂອງຂ້າພະເຈົ້າເອີຍ, ຜູ້ໃດທີ່ທຳນາຍ, ໃຫ້ ເຂົາທຳນາຍເຖິງຄວາມເຂົ້າໃຈຂອງມະນຸດ; ເພາະວ່າ ພຣະວິນຍານກ່າວດ້ວຍຄວາມຈິງ ແລະ ບໍ່ຕົວະ. ດັ່ງນັ້ນ, ມັນຈຶ່ງ ກ່າວເຖິງເລື່ອງດັ່ງທີ່ ເປັນຈິງ ແລະ ເຖິງເລື່ອງດັ່ງທີ່ຈະເປັນຈິງ. ດັ່ງນັ້ນເລື່ອງເຫລົ່ານີ້ຈຶ່ງຖືກສະແດງໃຫ້ປະຈັກແກ່ພວກເຮົາ ຢ່າງແຈ່ມແຈ້ງ ເພື່ອຄວາມລອດຂອງຈິດວິນຍານຂອງພວກ ເຮົາ. ແຕ່ຈົ່ງເບິ່ງ, ພວກເຮົາບໍ່ໄດ້ເປັນພະຍານໃນເລື່ອງເຫລົ່ານີ້ ຕາມລຳພັງ; ເພາະພຣະເຈົ້າໄດ້ຮັບສັ່ງເລື່ອງເຫລົ່ານີ້ກັບສາດ ສະດາໃນສະໄໝກ່ອນມາແລ້ວ.

Behold, my brethren, he that prophesieth, let him prophesy to the understanding of men; for the Spirit speaketh the truth and lieth not. Wherefore, it speaketh of things as they really are, and of things as they really will be; wherefore, these things are manifested unto us plainly, for the salvation of our souls. But behold, we are not witnesses alone in these things; for God also spake them unto prophets of old.

ແຕ່ຈົ່ງເບິ່ງ, ຊາວຢິວເປັນຄົນ ແຂງຄໍ ແລະ ພວກເຂົາ ດູໝິ່ນ ປະໝາດຄຳເວົ້າອັນແຈ່ມແຈ້ງ ແລະ ເຂັ່ນຂ້າສາດສະດາ, ແລະ ສະແຫວງຫາສິ່ງທີ່ພວກເຂົາບໍ່ອາດເຂົ້າໃຈໄດ້. ດັ່ງນັ້ນເພາະ ຄວາມຕາບອດຂອງພວກເຂົາຊຶ່ງຕາບອດນັ້ນມາຈາກການເບິ່ງ ຂ້າມເຄື່ອງໝາຍ, ພວກເຂົາຈຶ່ງຈຳຕ້ອງຕົກໄປ; ເພາະພຣະເຈົ້າ ໄດ້ເອົາຄວາມແຈ່ມແຈ້ງຂອງພຣະອົງໄປຈາກພວກເຂົາ, ແລະ ມອບຫລາຍສິ່ງຫລາຍຢ່າງໃຫ້ແກ່ພວກເຂົາຊຶ່ງພວກເຂົາ ເຂົ້າໃຈ ບໍ່ໄດ້, ເພາະພວກເຂົາປາດຖະໜາແນວນັ້ນ. ແລະ ຍ້ອນ ວ່າພວກເຂົາປາດຖະໜາແນວນັ້ນ, ພຣະເຈົ້າຈຶ່ງເຮັດແນວນັ້ນ ເພື່ອພວກເຂົາຈະໄດ້ສະດຸດ.

But behold, the Jews were a stiffnecked people; and they despised the words of plainness, and killed the prophets, and sought for things that they could not understand. Wherefore, because of their blindness, which blindness came by looking beyond the mark, they must needs fall; for God hath taken away his plainness from them, and delivered unto them many things which they cannot understand, because they desired it. And because they desired it God hath done it, that they may stumble.

ແລະ ບັດນີ້ຂ້າພະເຈົ້າຢາໂຄບໄດ້ຖືກນຳພາໂດຍ ພຣະວິນຍານໄປເຖິງການທຳນາຍ; ເພາະຂ້າພະເຈົ້າໄດ້ເຫັນ ໂດຍການກະທຳຂອງພຣະວິນຍານຊຶ່ງຢູ່ໃນຂ້າພະເຈົ້າ, ວ່າໂດຍ ການສະດຸດຂອງຊາວຢິວ ພວກເຂົາຈະບໍ່ ຍອມຮັບ ຫີນຊຶ່ງຢູ່ ເທິງນັ້ນພວກເຂົາຈະໄດ້ສ້າງ ແລະ ມີຮາກຖານອັນປອດໄພ.

And now I, Jacob, am led on by the Spirit unto prophesying; for I perceive by the workings of the Spirit which is in me, that by the stumbling of the Jews they will reject the stone upon which they might build and have safe foundation.

ແຕ່ຈົ່ງເບິ່ງ, ຕາມພຣະຄຳພີແລ້ວ, ຫີນກ້ອນນີ້ຈະກາຍເປັນ ຮາກຖານອັນຍິ່ງໃຫຍ່ ແລະ ສຸດທ້າຍ ແລະ ແນ່ນອນອັນດຽວ, ຊຶ່ງເທິງນັ້ນຊາວຢິວຈະສາມາດສ້າງຂຶ້ນໄດ້.

But behold, according to the scriptures, this stone shall become the great, and the last, and the only sure foundation, upon which the Jews can build.

ແລະ ບັດນີ້ທ່ານທີ່ຮັກຂອງຂ້າພະເຈົ້າ, ເປັນໄປໄດ້ແນວໃດທີ່ ຄົນເຫລົ່ານີ້ຫລັງຈາກປະຕິເສດຮາກຖານ ອັນແນ່ນອນແລ້ວຈະ ສ້າງຂຶ້ນເທິງນັ້ນໄດ້ ເພື່ອວ່າມັນຈະໄດ້ກາຍເປັນຫີນເອກຂອງ ພວກເຂົາ?

And now, my beloved, how is it possible that these, after having rejected the sure foundation, can ever build upon it, that it may become the head of their corner?

ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າຢາກ ເປີດເຜີຍຄວາມລຶກລັບນີ້ແກ່ພວກທ່ານ; ຖ້າຫາກດ້ວຍວິທີໃດ ກໍຕາມຂ້າພະເຈົ້າບໍ່ຫວັ່ນໄຫວຈາກຄວາມໝັ້ນຄົງຂອງ ຂ້າພະເຈົ້າໃນພຣະວິນຍານ ແລະ ສະດຸດເພາະຄວາມເປັນຫ່ວງ ທີ່ຂ້າພະເຈົ້າມີຕໍ່ພວກທ່ານຫລາຍເກີນໄປ.

Behold, my beloved brethren, I will unfold this mystery unto you; if I do not, by any means, get shaken from my firmness in the Spirit, and stumble because of my over anxiety for you.

ຢາໂຄບ ๕

Jacob 5

๑ ຈົ່ງເບິ່ງ, ພີ່ນ້ອງຂອງຂ້າພະເຈົ້າເອີຍ, ພວກທ່ານຈຳບໍ່ໄດ້ບໍ່ວ່າ ພວກທ່ານເຄີຍອ່ານຂໍ້ຄວາມຂອງສາດສະດາ ຊີນັດ ຊຶ່ງເພິ່ນໄດ້ ເວົ້າກັບເຊື້ອສາຍອິດສະຣາເອນ, ມີຄວາມວ່າ:

Behold, my brethren, do ye not remember to have read the words of the prophet Zenos, which he spake unto the house of Israel, saying:

๘ ໂອ້ ເຊື້ອສາຍອິດສະຣາເອນເອີຍ, ຈົ່ງຟັງ ແລະ ຈົ່ງເຊື່ອຟັງຄຳ ເວົ້າຂອງຂ້າພະເຈົ້າ ຜູ້ເປັນສາດສະດາຄົນໜຶ່ງຂອງພຣະຜູ້ເປັນ ເຈົ້າ.

Hearken, O ye house of Israel, and hear the words of me, a prophet of the Lord.

๙ ເພາະຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ໂອ້ ເຊື້ອສາຍ ອິດສະຣາເອນເອີຍ, ເຮົາຈະປຽບທຽບເຈົ້າໃສ່ກັບ ຕົ້ນ ໝາກກອກເທດໃນສວນ, ຊຶ່ງຄົນຜູ້ໜຶ່ງເອົາມາປູກ ແລະ ບົວລະບັດໃນ ສວນອະງຸ່ນຂອງເພິ່ນ; ແລະ ມັນໃຫຍ່ຂຶ້ນ, ແລະ ເຖົ້າແກ່ລົງ, ແລະ ເລີ່ມ ຊຸດໂຊມລົງ.

For behold, thus saith the Lord, I will liken thee, O house of Israel, like unto a tame olive tree, which a man took and nourished in his vineyard; and it grew, and waxed old, and began to decay.

๑๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້ານາຍຂອງສວນອະງຸ່ນໄດ້ ອອກໄປ ແລະ ເພິ່ນເຫັນວ່າຕົ້ນໝາກກອກເທດຂອງເພິ່ນ ເລີ່ມ ຊຸດໂຊມລົງ; ແລະ ເພິ່ນໄດ້ກ່າວວ່າ: ເຮົາຈະລີງ່າຂອງມັນອອກ ແລະ ພວນດິນຮອບຕົ້ນມັນ ແລະ ບຳລຸງມັນເພື່ອມັນຈະແຕກງ່າ ແລະ ປົ່ງໃບງາມຂຶ້ນເພື່ອມັນຈະບໍ່ຕາຍ.

And it came to pass that the master of the vineyard went forth, and he saw that his olive tree began to decay; and he said: I will prune it, and dig about it, and nourish it, that perhaps it may shoot forth young and tender branches, and it perish not.

๑๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນໄດ້ລີງ່າມັນອອກ ແລະ ໄດ້ພວນດິນຮອບຕົ້ນມັນ, ແລະ ບຳລຸງມັນຕາມຄຳເວົ້າຂອງ ເພິ່ນ.

And it came to pass that he pruned it, and digged about it, and nourished it according to his word.

๑๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກນັ້ນ, ຫລາຍມື້ ຕໍ່ມາມັນໄດ້ແຕກງ່າ ແລະ ປົ່ງໃບງາມຂຶ້ນ, ຈົ່ງເບິ່ງຍອດໃຫຍ່ ຂອງມັນເລີ່ມຫ່ຽວແຫ້ງລົງ.

And it came to pass that after many days it began to put forth somewhat a little, young and tender branches; but behold, the main top thereof began to perish.

๑๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້ານາຍຂອງສວນອະງຸ່ນໄດ້ ເຫັນ ແລະ ເວົ້າກັບຄົນໃຊ້ຂອງເພິ່ນວ່າ: ມັນເຮັດໃຫ້ເຮົາມີຄວາມ ໂສກເສົ້າຫລາຍທີ່ຈະສູນເສຍຕົ້ນໄມ້ນີ້ໄປ; ດັ່ງນັ້ນ ຈົ່ງໄປຕັດເອົາ ງ່າຂອງຕົ້ນໝາກກອກ ປ່າ, ແລ້ວເອົາມັນມາໃຫ້ເຮົາ; ແລະ ພວກເຮົາຈະຫັກງ່າໃຫຍ່ ຊຶ່ງກຳລັງຫ່ຽວແຫ້ງອອກ, ແລະ ພວກເຮົາຈະໂຍນມັນເຂົ້າກອງໄຟໃຫ້ມັນໄໝ້ໄປເສຍ.

And it came to pass that the master of the vineyard saw it, and he said unto his servant: It grieveth me that I should lose this tree; wherefore, go and pluck the branches from a wild olive tree, and bring them hither unto me; and we will pluck off those main branches which are beginning to wither away, and we will cast them into the fire that they may be burned.

๑๔ ແລະ ຈົ່ງເບິ່ງ ເຈົ້ານາຍຂອງສວນອະງຸ່ນໄດ້ກ່າວວ່າ, ເຮົາຈະ ເອົາງ່າອ່ອນ ແລະ ງາມເຫລົ່ານີ້ຢ່າງຫລວງຫລາຍໄປ, ແລະ ເຮົາ ຈະຕໍ່ງ່າມັນເຂົ້າກັບທີ່ໃດກໍຕາມທີ່ເຮົາຕ້ອງການ; ເຖິງວ່າຮາກ ຂອງມັນຈະຕາຍກໍບໍ່ສຳຄັນ, ເຮົາຈະຮັກສາແນວຂອງມັນໄວ້ໃຫ້ ຕົວເຮົາເອງ; ດັ່ງນັ້ນ, ເຮົາຈະເອົາກິ່ງອ່ອນ ແລະ ງາມເຫລົ່ານີ້ໄປ ແລະ ເຮົາຈະຕໍ່ງ່າມັນເຂົ້າກັບທີ່ໃດກໍຕາມທີ່ເຮົາຕ້ອງການ.

And behold, saith the Lord of the vineyard, I take away many of these young and tender branches, and I will graft them whithersoever I will; and it mattereth not that if it so be that the root of this tree will perish, I may preserve the fruit thereof unto myself; wherefore, I will take these young and tender branches, and I will graft them whithersoever I will.

ນ ເຈົ້າຈົ່ງເອົາງ່າຂອງຕົ້ນໝາກກອກປ່າໄປ ແລະ ຕໍ່ງ່າມັນເຂົ້າ
ແທນທີ່, ແລະ ງ່າເຫລົ່ານີ້ທີ່ເຮົາໄດ້ຫັກອອກ ເຮົາຈະໂຍນມັນ
ເຂົ້າກອງໄຟ ແລະ ຈູດມັນເສຍ ເພື່ອມັນຈະບໍ່ເປັນສິ່ງກີດຂວາງ
ໃນສວນອະງຸ່ນຂອງເຮົາ.

ນ ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນໃຊ້ຂອງເຈົ້ານາຍຂອງ
ສວນອະງຸ່ນໄດ້ປະຕິບັດຕາມຄຳສັ່ງຂອງເຈົ້ານາຍຂອງສວນ
ອະງຸ່ນ, ແລະ ໄດ້ຕໍ່ງ່າຂອງຕົ້ນໝາກກອກ ປ່າ.

ນ ແລະ ເຈົ້ານາຍຂອງສວນອະງຸ່ນໃຫ້ພວນດິນຮອບຕົ້ນ, ແລະ
ລີ່ງ່າ, ແລະ ບຳລຸງ, ໂດຍກ່າວກັບຄົນໃຊ້ຂອງເພີ່ນວ່າ: ມັນເຮັດ
ໃຫ້ເຮົາໂສກເສົ້າທີ່ເຮົາຈະສູນເສຍຕົ້ນໄມ້ນີ້ໄປ; ດັ່ງນັ້ນເພື່ອເຮົາ
ອາດຈະໄດ້ຮັກສາຮາກຂອງມັນໄວ້ບໍ່ໃຫ້ຕາຍ ເພື່ອເຮົາຈະໄດ້
ຮັກສາມັນໄວ້ໃຫ້ຕົວເຮົາ, ເຮົາຈຶ່ງເຮັດດັ່ງນີ້.

ນ ດັ່ງນັ້ນ, ເຈົ້າຈົ່ງໄປເຖີດ; ຈົ່ງບົວລະບັດຕົ້ນໄມ້ນີ້ ແລະ ບຳລຸງ
ມັນຕາມຄຳທີ່ເຮົາສັ່ງ.

ນ ແລະ ເຮົາຈະ ວາງງ່າເຫລົ່ານີ້ໄວ້ໃນບ່ອນໄກທີ່ສຸດຂອງສວນ
ອະງຸ່ນຂອງເຮົາ, ບ່ອນໃດກໍຕາມແລ້ວແຕ່ເຮົາຕ້ອງການ, ແລະ ບໍ່
ສຳຄັນສຳລັບເຈົ້າ; ແລະ ເຮົາເຮັດສິ່ງນີ້ເພື່ອເຮົາຈະໄດ້ຮັກສາງ່າ
ເດີມຂອງຕົ້ນມັນໄວ້; ແລະ ເພື່ອວ່າເຮົາຈະໄດ້ເກັບໝາກຂອງມັນ
ໄວ້ ເພື່ອລະດູການໜ້າ ໃຫ້ຕົວເຮົາໃຊ້ນຳອີກ; ເພາະວ່າມັນເຮັດ
ໃຫ້ເຮົາໂສກເສົ້າທີ່ເຮົາຈະສູນເສຍຕົ້ນໄມ້ນີ້ ແລະ ໝາກຂອງມັນ.

ນ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້ານາຍຂອງສວນອະງຸ່ນໄດ້
ອອກໄປ ແລະ ເຊື່ອງງ່າເດີມຂອງຕົ້ນໝາກກອກເທດໄວ້ບ່ອນ
ໄກທີ່ສຸດຂອງສວນອະງຸ່ນ, ບາງງ່າໄວ້ບ່ອນໜຶ່ງ, ແລະ ບາງງ່າ
ໄວ້ອີກບ່ອນໜຶ່ງຕາມຄວາມປະສົງ ແລະ ຕາມຄວາມພໍໃຈຂອງ
ເພີ່ນ.

ນ ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລາຍປີຜ່ານໄປ, ແລະ ເຈົ້າ
ນາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້ຂອງເພີ່ນວ່າ: ມາເຖີດ,
ໃຫ້ພວກເຮົາລົງໄປໃນສວນອະງຸ່ນເພື່ອເຮັດວຽກງານໃນສວນ
ອະງຸ່ນ.

ນ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້ານາຍຂອງສວນອະງຸ່ນ
ກັບຄົນໃຊ້ຂອງເພີ່ນໄດ້ລົງໄປໃນສວນອະງຸ່ນເພື່ອເຮັດວຽກ.
ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນໃຊ້ໄດ້ເວົ້າກັບເຈົ້ານາຍຂອງ
ຕົນວ່າ: ຈົ່ງເບິ່ງ, ເບິ່ງນີ້ແມ; ຈົ່ງຫລຽວເບິ່ງຕົ້ນໄມ້ນີ້.

ນ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້ານາຍຂອງສວນອະງຸ່ນໄດ້
ຫລຽວເບິ່ງ ແລະ ໄດ້ເຫັນຕົ້ນໄມ້ ຕົ້ນທີ່ກິ່ງໝາກກອກປ່າຖືກຕໍ່
ງ່າໄວ້; ແລະ ມັນງອກງາມ ແລະ ເປັນ ໝາກແລ້ວ. ແລະ ເພີ່ນ
ເຫັນວ່າ ມັນດີ ແລະ ໝາກຂອງມັນຄືກັນກັບໝາກຈາກຕົ້ນເດີມ
ຂອງມັນ.

Take thou the branches of the wild olive tree, and graft them in, in the stead thereof; and these which I have plucked off I will cast into the fire and burn them, that they may not cumber the ground of my vineyard.

And it came to pass that the servant of the Lord of the vineyard did according to the word of the Lord of the vineyard, and grafted in the branches of the wild olive tree.

And the Lord of the vineyard caused that it should be digged about, and pruned, and nourished, saying unto his servant: It grieveth me that I should lose this tree; wherefore, that perhaps I might preserve the roots thereof that they perish not, that I might preserve them unto myself, I have done this thing.

Wherefore, go thy way; watch the tree, and nourish it, according to my words.

And these will I place in the nethermost part of my vineyard, whithersoever I will, it mattereth not unto thee; and I do it that I may preserve unto myself the natural branches of the tree; and also, that I may lay up fruit thereof against the season, unto myself; for it grieveth me that I should lose this tree and the fruit thereof.

And it came to pass that the Lord of the vineyard went his way, and hid the natural branches of the tame olive tree in the nethermost parts of the vineyard, some in one and some in another, according to his will and pleasure.

And it came to pass that a long time passed away, and the Lord of the vineyard said unto his servant: Come, let us go down into the vineyard, that we may labor in the vineyard.

And it came to pass that the Lord of the vineyard, and also the servant, went down into the vineyard to labor. And it came to pass that the servant said unto his master: Behold, look here; behold the tree.

And it came to pass that the Lord of the vineyard looked and beheld the tree in the which the wild olive branches had been grafted; and it had sprung forth and begun to bear fruit. And he beheld that it was good; and the fruit thereof was like unto the natural fruit.

ຄ. ๑๗ ແລະ ເພິ່ນໄດ້ກ່າວກັບຄົນໃຊ້ວ່າ: ຈົ່ງເບິ່ງ, ງ່າຂອງຕົ້ນປ່າໄດ້ຮັບຄວາມຊຸ່ມເຢັນຈາກຮາກຂອງມັນ ຈົນຮາກນັ້ນເຮັດໃຫ້ເກີດຄວາມແຂງແຮງຂຶ້ນ, ແລະ ຮາກຂອງມັນມີຄວາມແຂງແຮງຫລາຍ; ງ່າປ່າຈຶ່ງເກີດໝາກຫວານ. ບັດນີ້, ຖ້າຫາກພວກເຮົາບໍ່ເອົາງ່າເຫລົ່ານີ້ມາຕໍ່ງ່າເຂົ້າກັບຕົ້ນຂອງມັນ, ມັນກໍອາດຈະຕາຍ ແລະ ບັດນີ້, ຈົ່ງເບິ່ງເຮົາຈະເກັບເອົາໝາກທີ່ເກີດຈາກຕົ້ນຂອງມັນໄວ້ໃຫ້ຫລາຍ; ແລະ ໝາກຂອງມັນເຮົາຈະເກັບມັນໄວ້ເພື່ອລະດູການໜ້າ ໃຫ້ຕົວຂອງເຮົາເອງ.

And he said unto the servant: Behold, the branches of the wild tree have taken hold of the moisture of the root thereof, that the root thereof hath brought forth much strength; and because of the much strength of the root thereof the wild branches have brought forth tame fruit. Now, if we had not grafted in these branches, the tree thereof would have perished. And now, behold, I shall lay up much fruit, which the tree thereof hath brought forth; and the fruit thereof I shall lay up against the season, unto mine own self.

ຄ. ๑๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້ານາຍຂອງສວນອະງ่ຸນໄດ້ກ່າວກັບຄົນໃຊ້ຂອງເພິ່ນວ່າ: ມານີ້, ແລ້ວພາກັນໄປບ່ອນໄກທີ່ສຸດຂອງສວນອະງ่ຸນ, ແລະ ແນມເບິ່ງວ່າງ່າເດີມຂອງຕົ້ນໄມ້ມີໝາກຫລາຍຄືກັນບໍ່, ເພື່ອເຮົາຈະໄດ້ເກັບໝາກຂອງມັນໄວ້ເພື່ອລະດູການໜ້າ ໃຫ້ຕົວເຮົາເອງ.

And it came to pass that the Lord of the vineyard said unto the servant: Come, let us go to the nethermost part of the vineyard, and behold if the natural branches of the tree have not brought forth much fruit also, that I may lay up of the fruit thereof against the season, unto mine own self.

ຄ. ๘๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ທັງສອງໄດ້ອອກໄປຫາບ່ອນທີ່ເພິ່ນເຊື່ອງງ່າເດີມຂອງຕົ້ນໄມ້ນັ້ນໄວ້, ແລະ ເພິ່ນໄດ້ກ່າວກັບຄົນໃຊ້ວ່າ: ຈົ່ງເບິ່ງ, ສິ່ງເຫລົ່ານີ້; ແລະ ເຂົາເຫັນ ຕົ້ນທຳອິດທີ່ເປັນໝາກ, ແລະ ເຂົາເຫັນວ່າມັນດີ. ແລະ ເພິ່ນໄດ້ກ່າວອີກວ່າ: ຈົ່ງເອົາໝາກຂອງມັນໄວ້ ເພື່ອລະດູການໜ້າ, ເພື່ອເຮົາຈະຮັກສາມັນໄວ້ໃຫ້ຕົວເຮົາເອງ; ເພາະຈົ່ງເບິ່ງ, ພຣະອົງໄດ້ກ່າວວ່າ, ເຮົາບຳລຸງຮັກສາມັນເປັນເວລາດົນນານມາແລ້ວ, ແລະ ມັນເປັນໝາກຫລາຍ.

And it came to pass that they went forth whither the master had hid the natural branches of the tree, and he said unto the servant: Behold these; and he beheld the first that it had brought forth much fruit; and he beheld also that it was good. And he said unto the servant: Take of the fruit thereof, and lay it up against the season, that I may preserve it unto mine own self; for behold, said he, this long time have I nourished it, and it hath brought forth much fruit.

ຄ. ๘๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນໃຊ້ໄດ້ທູນຖາມເຈົ້ານາຍຂອງຕົນວ່າ: ເປັນຫຍັງທ່ານຈຶ່ງມາປູກຕົ້ນໄມ້ນີ້, ຫລື ງ່ານີ້ໄວ້ບ່ອນນີ້? ເພາະຈົ່ງເບິ່ງ, ມັນເປັນບ່ອນທີ່ບໍ່ດີທີ່ສຸດໃນທີ່ດິນທັງໝົດຂອງສວນອະງ่ຸນ.

And it came to pass that the servant said unto his master: How comest thou hither to plant this tree, or this branch of the tree? For behold, it was the poorest spot in all the land of thy vineyard.

ຄ. ๘๒ ແລະ ເຈົ້ານາຍຂອງສວນອະງ่ຸນໄດ້ກ່າວກັບເຂົາວ່າ: ຢ່າໄດ້ແນະນຳເຮົາເລີຍ; ເຮົາຮູ້ແລ້ວວ່າ ບ່ອນນີ້ເປັນບ່ອນບໍ່ດີ; ດັ່ງນັ້ນ ເຮົາກ່າວກັບເຈົ້າວ່າ, ເຮົາໄດ້ບຳລຸງມັນມາເປັນເວລາດົນນານແລ້ວ, ແລະ ເຈົ້າເອງກໍເຫັນວ່າມັນເປັນໝາກຢ່າງຫລວງຫລາຍ.

And the Lord of the vineyard said unto him: Counsel me not; I knew that it was a poor spot of ground; wherefore, I said unto thee, I have nourished it this long time, and thou beholdest that it hath brought forth much fruit.

ຄ. ๘๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້ານາຍຂອງສວນອະງ่ຸນໄດ້ກ່າວກັບຄົນໃຊ້ຂອງເພິ່ນວ່າ: ເບິ່ງນີ້ແມ; ຈົ່ງເບິ່ງວ່າ ເຮົາໄດ້ປູກອີກງ່າໜຶ່ງຂອງຕົ້ນໄມ້ອີກ; ແລະ ເຈົ້າຮູ້ວ່າດິນບ່ອນນີ້ຂີ້ຮ້າຍກວ່າບ່ອນທຳອິດ. ແຕ່ຈົ່ງເບິ່ງ, ເຮົາໄດ້ບຳລຸງມັນເປັນເວລາດົນນານ, ແລະ ມັນເປັນໝາກຢ່າງຫລວງຫລາຍ; ສະນັ້ນ, ຈົ່ງເຕົ້າໂຮມມັນ ແລະ ມ້ຽນໄວ້ ເພື່ອລະດູການໜ້າ, ເພື່ອເຮົາຈະໄດ້ຮັກສາມັນໄວ້ໃຫ້ຕົວເຮົາເອງ.

And it came to pass that the Lord of the vineyard said unto his servant: Look hither; behold I have planted another branch of the tree also; and thou knowest that this spot of ground was poorer than the first. But, behold the tree. I have nourished it this long time, and it hath brought forth much fruit; therefore, gather it, and lay it up against the season, that I may preserve it unto mine own self.

ຄ๔ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າບາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້ຂອງເພີ່ນອີກว່າ: ເບິ່ງນີ້ແມ, ແລະ ຈົ່ງເບິ່ງອີກງ່າໜຶ່ງທີ່ເຮົາໄດ້ປູກໄວ້ອີກ; ຈົ່ງເບິ່ງว່າ ເຮົາໄດ້ບຳລຸງມັນມາຫລາຍແລ້ວ, ແລະ ມັນກໍເປັນໝາກຢ່າງຫລວງຫລາຍ.

And it came to pass that the Lord of the vineyard said again unto his servant: Look hither, and behold another branch also, which I have planted; behold that I have nourished it also, and it hath brought forth fruit.

ຄ๕ ແລະ ເພີ່ນໄດ້ກ່າວກັບຄົນໃຊ້ວ່າ: ເບິ່ງນີ້ແມ ແລະ ຈົ່ງເບິ່ງຕົ້ນສຸດທ້າຍ. ຈົ່ງເບິ່ງ, ຕົ້ນນີ້ເຮົາປູກໄວ້ໃນດິນບ່ອນ ດີ; ແລະ ເຮົາໄດ້ບຳລຸງມັນເປັນເວລາດົນນານ, ແລະ ມີພຽງສ່ວນໜຶ່ງເທົ່ານັ້ນທີ່ມີໝາກຫວານ, ແລະ ອີກສ່ວນໜຶ່ງກາຍເປັນໝາກຂົມ; ຈົ່ງເບິ່ງ, ເຮົາໄດ້ບຳລຸງມັນຄືກັນກັບຕົ້ນອື່ນໆ.

And he said unto the servant: Look hither and behold the last. Behold, this have I planted in a good spot of ground; and I have nourished it this long time, and only a part of the tree hath brought forth tame fruit, and the other part of the tree hath brought forth wild fruit; behold, I have nourished this tree like unto the others.

ຄ๖ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າບາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້ຂອງເພີ່ນว່າ: ຈົ່ງຫັກງ່າທີ່ບໍ່ເປັນ ໝາກດີ ແລະ ໂຍນມັນເຂົ້າກອງໄຟເສຍ.

And it came to pass that the Lord of the vineyard said unto the servant: Pluck off the branches that have not brought forth good fruit, and cast them into the fire.

ຄ๗ ແຕ່ຈົ່ງເບິ່ງ, ຄົນໃຊ້ໄດ້ກ່າວກັບເພີ່ນว່າ: ໃຫ້ພວກເຮົາລິງ່ຳມັນ ແລະ ພວນດິນອ້ອມຕົ້ນມັນເພື່ອບຳລຸງ ຮັກສາມັນຕໍ່ໄປຈັກໜ້ອຍເຖີດ ເພື່ອວ່າມັນອາດຈະເປັນໝາກດີໃຫ້ທ່ານ, ເພື່ອທ່ານຈະເກັບມັນໄວ້ ເພື່ອລະດູການໜ້າໄດ້.

But behold, the servant said unto him: Let us prune it, and dig about it, and nourish it a little longer, that perhaps it may bring forth good fruit unto thee, that thou canst lay it up against the season.

ຄ๘ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າບາຍຂອງສວນອະງຸ່ນ ກັບຄົນໃຊ້ຂອງເຈົ້າບາຍຂອງສວນອະງຸ່ນ ໄດ້ບຳລຸງໝາກໄມ້ທັງໝົດຂອງສວນອະງຸ່ນນັ້ນ.

And it came to pass that the Lord of the vineyard and the servant of the Lord of the vineyard did nourish all the fruit of the vineyard.

ຄ๙ ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາດົນນານຜ່ານໄປ, ແລະ ເຈົ້າບາຍຂອງສວນອະງຸ່ນໄດ້ກ່າວກັບ ຄົນໃຊ້ຂອງເພີ່ນว່າ: ມານີ້, ໃຫ້ພວກເຮົາລົງໄປໃນສວນອະງຸ່ນນຳກັນເທາະ, ເພື່ອພວກເຮົາຈະໄດ້ເຮັດວຽກໃນສວນອະງຸ່ນອີກ. ເພາະຈົ່ງເບິ່ງ, ເວລາໃກ້ເຂົ້າມາແລ້ວ ແລະ ທີ່ສຸດກໍຈະມາເຖິງໃນບໍ່ຊ້ານີ້; ດັ່ງນັ້ນ, ເຮົາຕ້ອງເກັບໝາກໄມ້ໄວ້ ເພື່ອລະດູການໜ້າ ໃຫ້ຕົວເຮົາເອງ.

And it came to pass that a long time had passed away, and the Lord of the vineyard said unto his servant: Come, let us go down into the vineyard, that we may labor again in the vineyard. For behold, the time draweth near, and the end soon cometh; wherefore, I must lay up fruit against the season, unto mine own self.

ມ๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າບາຍຂອງສວນອະງຸ່ນ ກັບຄົນໃຊ້ໄດ້ພາກັນລົງໄປໃນສວນອະງຸ່ນ; ແລະ ທັງສອງມາເຖິງຕົ້ນທີ່ງ່າເດີມຂອງມັນຖືກຫັກອອກໄປ ແລະ ເອົາງ່າປ່າມາຕໍ່ເຂົ້າໄວ້; ແລະ ຈົ່ງເບິ່ງ, ໝາກຜົນ ຊະນິດຕ່າງໆໄດ້ກີດຂວາງຕົ້ນ.

And it came to pass that the Lord of the vineyard and the servant went down into the vineyard; and they came to the tree whose natural branches had been broken off, and the wild branches had been grafted in; and behold all sorts of fruit did cumber the tree.

ມ๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້າບາຍຂອງສວນອະງຸ່ນໄດ້ຊິມລົດຊາດຂອງໝາກໄມ້ທຸກຊະນິດ ຕາມຈຳນວນຂອງມັນ. ແລະ ເຈົ້າບາຍຂອງສວນອະງຸ່ນໄດ້ກ່າວว່າ: ຈົ່ງເບິ່ງ, ພວກເຮົາບຳລຸງຕົ້ນນີ້ເປັນເວລາດົນນານ, ແລະ ເຮົາໄດ້ເກັບເອົາໝາກຂອງມັນໄວ້ຫລາຍພໍສົມຄວນ ເພື່ອລະດູການໜ້າ ໃຫ້ຕົວເຮົາເອງ.

And it came to pass that the Lord of the vineyard did taste of the fruit, every sort according to its number. And the Lord of the vineyard said: Behold, this long time have we nourished this tree, and I have laid up unto myself against the season much fruit.

ມ໕໘ ແຕ່ຈົ່ງເບິ່ງ, ເທື່ອນີ້ມັນເປັນໝາກຫລາຍແຕ່ ບໍ່ມີໜ່ວຍດີ, ແລະ ຈົ່ງເບິ່ງ ໝາກໄມ້ທຸກຊະນິດບໍ່ມີໜ່ວຍດີເລີຍ; ແລະ ມັນບໍ່ມີປະໂຫຍດແກ່ເຮົາຈັກດີ ເຖິງແມ່ນວ່າພວກເຮົາໄດ້ລົງແຮງທັງໝົດ; ແລະ ບັດນີ້ມັນເຮັດໃຫ້ເຮົາໂສກເສົ້າທີ່ຈະສູນເສຍຕົ້ນໄມ້ເຫລົ່ານີ້ໄປ.

ມ໕ມ ແລະ ເຈົ້ານາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້ວ່າ: ພວກເຮົາຈະເຮັດແນວໃດກັບຕົ້ນໄມ້ນີ້, ເພື່ອເຮົາຈະຮັກສາໝາກໜ່ວຍດີຂອງມັນໄວ້ໃຫ້ຕົວເຮົາເອງ?

ມ໕ຫ ແລະ ຄົນໃຊ້ໄດ້ກ່າວກັບເຈົ້ານາຍວ່າ: ຈົ່ງເບິ່ງເຖີດ ເພາະທ່ານໄດ້ເອົາງ່າຕົ້ນໝາກກອກປ່າຕໍ່ງ່າເຂົ້າໄວ້, ມັນຈຶ່ງບຳລຸງຮາກເພື່ອມັນຈະມີຊີວິດຢູ່ ແລະ ບໍ່ຕາຍ; ດັ່ງນັ້ນ ທ່ານຈຶ່ງເຫັນວ່າມັນຍັງດີ.

ມ໕ສ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້ານາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້ຂອງເພີ່ນວ່າ: ຕົ້ນນີ້ບໍ່ມີປະໂຫຍດຫຍັງແກ່ເຮົາເລີຍ, ແລະ ຮາກຂອງມັນກໍບໍ່ມີປະໂຫຍດຫຍັງແກ່ເຮົາເລີຍຕາບໃດທີ່ມັນຍັງເປັນໝາກບໍ່ດີ.

ມ໕ຫ ແຕ່ເຖິງຢ່າງໃດກໍຕາມ, ເຮົາຍັງຮູ້ວ່າຮາກຂອງມັນດີ, ແລະ ເພື່ອຈຸດປະສົງຂອງເຮົາເອງ ເຮົາຈົ່ງຮັກສາມັນໄວ້; ແລະ ເພາະຄວາມແຂງແຮງຂອງມັນ, ມັນຈົ່ງເປັນໝາກດີຈາກງ່າໄມ້ປ່າ.

ມ໕ໜ ແຕ່ຈົ່ງເບິ່ງ, ງ່າໄມ້ປ່າໃຫຍ່ຂຶ້ນ ແລະ ບຽດຮາກຂອງມັນ ແລະ ງ່າໄມ້ປ່າ ມີກຳລັງແຮງກວ່າຮາກຂອງມັນ, ມັນຈົ່ງເປັນໝາກບໍ່ດີຫລາຍ; ແລະ ເພາະວ່າມັນເປັນໝາກບໍ່ດີ, ເຈົ້າຈົ່ງເຫັນວ່າມັນເລີ່ມຕາຍ; ແລະ ໃນທີ່ສຸດມັນກໍຈະສຸກຈົນວ່າຖືກໂຍນເຂົ້າໄປໃນກອງໄຟ ຖ້າຫາກພວກເຮົາບໍ່ເຮັດແນວໃດແນວໜຶ່ງກັບມັນເພື່ອຮັກສາມັນໄວ້.

ມ໕ສ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຈົ້ານາຍຂອງສວນອະງຸ່ນໄດ້ກ່າວກັບຄົນໃຊ້ຂອງເພີ່ນວ່າ: ໃຫ້ພວກເຮົາພາກັນລົງໄປບ່ອນໄກທີ່ສຸດຂອງສວນອະງຸ່ນເທາະ, ແລະ ແນມເບິ່ງວ່າງ່າເດີມຂອງມັນອອກໝາກບໍ່ດີຄືກັນຫລືບໍ່.

ມ໕ຫ ແລະ ເຫດການໄດ້ບັງເກີດຂຶ້ນຄື ທັງສອງໄດ້ລົງໄປບ່ອນໄກທີ່ສຸດຂອງສວນອະງຸ່ນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ທັງສອງໄດ້ເຫັນໝາກໄມ້ຈາກງ່າເດີມກັບມາເສຍຫາຍຄືກັນ; ແທ້ຈິງແລ້ວ, ຕົ້ນ ທຳອິດ ແລະ ຕົ້ນທີສອງເຖິງຕົ້ນສຸດທ້າຍ; ແລະ ທັງໝົດກັບເສຍຫາຍໄປໝົດ.

ຄ໐ ແລະ ໝາກໄມ້ ປ່າຂອງຕົ້ນສຸດທ້າຍມີກຳລັງເໜືອກວ່າ ພາກສ່ວນຂອງຕົ້ນທີ່ອອກໝາກດີ ຈົນວ່າງ່າໄດ້ຫ່ຽວແຫ້ງ ແລະ ໄດ້ຕາຍໄປ.

But behold, this time it hath brought forth much fruit, and there is none of it which is good. And behold, there are all kinds of bad fruit; and it profiteth me nothing, notwithstanding all our labor; and now it grieveth me that I should lose this tree.

And they pitched their tents round about the temple, every man having his tent with the door thereof towards the temple, that thereby they might remain in their tents and hear the words which king Benjamin should speak unto them;

For the multitude being so great that king Benjamin could not teach them all within the walls of the temple, therefore he caused a tower to be erected, that thereby his people might hear the words which he should speak unto them.

ຄ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນເລີ່ມເວົ້າກັບຜູ້ຄົນຂອງ
ເພິ່ນຈາກຫໍສູງ; ແລະ ບາງຄົນບໍ່ສາມາດໄດ້ຍິນຂໍ້ຄວາມຂອງ
ເພິ່ນເພາະຄວາມຫລວງຫລາຍຂອງຝູງຊົນ; ສະນັ້ນ ເພິ່ນຈຶ່ງ
ໃຫ້ຂຽນຂໍ້ຄວາມທີ່ເພິ່ນເວົ້າໄວ້ ແລະ ສົ່ງອອກໄປໃຫ້ບັນດາຜູ້ທີ່
ບໍ່ໄດ້ຍິນສຽງຂອງເພິ່ນ, ເພື່ອພວກເຂົາຈະໄດ້ຮັບຂໍ້ຄວາມຂອງ
ເພິ່ນຄືກັນ.

ງ ແລະ ນີ້ຄືຂໍ້ຄວາມທີ່ເພິ່ນ ເວົ້າ ແລະ ໄດ້ຂຽນໄວ້, ມີຄວາມວ່າ:
ພີ່ນ້ອງຂອງຂ້າພະເຈົ້າ, ທ່ານທັງຫລາຍທີ່ມາຊຸມນຸມກັນ,
ພວກທ່ານຈະໄດ້ຍິນຂໍ້ຄວາມຂອງຂ້າພະເຈົ້າໄດ້ ຊຶ່ງຂ້າພະເຈົ້າ
ຈະເວົ້າກັບພວກທ່ານໃນມື້ນີ້ ເພາະຂ້າພະເຈົ້າບໍ່ໄດ້ສັ່ງໃຫ້ພວກ
ທ່ານຂຶ້ນມາບ່ອນນີ້ເພື່ອ ການມ່ວນຊື່ນກັບຂໍ້ຄວາມທີ່ຂ້າພະເຈົ້າ
ຈະເວົ້າ, ແຕ່ເພື່ອພວກທ່ານຈະ ເຊື່ອຟັງຂ້າພະເຈົ້າ ແລະ ເປີດຫູ
ຂອງພວກທ່ານເພື່ອພວກທ່ານຈະໄດ້ຍິນ, ແລະ ເປີດ ໃຈຂອງ
ພວກທ່ານເພື່ອພວກທ່ານຈະເຂົ້າໃຈ, ແລະ ເປີດ ຈິດໃຈຂອງ
ພວກທ່ານເພື່ອ ຄວາມລຶກລັບຂອງພຣະເຈົ້າຈະເປີດເຜີຍອອກ
ຕໍ່ສາຍຕາຂອງພວກທ່ານ.

ຈ ຂ້າພະເຈົ້າບໍ່ໄດ້ສັ່ງໃຫ້ພວກທ່ານຂຶ້ນມາບ່ອນນີ້ເພື່ອພວກ
ທ່ານຈະ ຢ້ານກົວຂ້າພະເຈົ້າ, ຫລື ເພື່ອພວກທ່ານຈະຄິດວ່າ ຕົວ
ຂ້າພະເຈົ້າເອງຍິ່ງໃຫຍ່ກວ່າມະນຸດ.

ສ ແຕ່ຂ້າພະເຈົ້າກໍຄືກັນກັບຕົວຂອງພວກທ່ານທີ່ຕ້ອງຂຶ້ນຢູ່
ກັບຈຸດອ່ອນທຸກຢ່າງໃນຮ່າງກາຍ ແລະ ຈິດໃຈ; ເຖິງຢ່າງໃດ
ກໍຕາມ ຂ້າພະເຈົ້າກໍໄດ້ຖືກເລືອກຈາກຜູ້ຄົນພວກນີ້, ແລະ ຮັບ
ການແຕ່ງຕັ້ງຈາກບິດາຂອງຂ້າພະເຈົ້າ, ແລະ ໄດ້ຮັບການ
ອະນຸຍາດຈາກພຣະຫັດຂອງພຣະຜູ້ເປັນເຈົ້າ ເພື່ອໃຫ້
ຂ້າພະເຈົ້າເປັນກະສັດ ແລະ ຜູ້ປົກຄອງ ເໜືອຜູ້ຄົນພວກນີ້;
ແລະ ໄດ້ຮັບການຮັກສາ ແລະ ປົກປ້ອງໂດຍອຳນາດອັນຫາທີ່
ປຽບບໍ່ໄດ້ຂອງພຣະອົງ, ທີ່ໃຫ້ຮັບໃຊ້ພຣະອົງດ້ວຍສຸດພະລັງ,
ຄວາມນຶກຄິດ, ແລະ ກຳລັງ ຊຶ່ງພຣະຜູ້ເປັນເຈົ້າໄດ້ປະທານໃຫ້
ແກ່ຂ້າພະເຈົ້າ.

ຊ ຂ້າພະເຈົ້າກ່າວກັບພວກທ່ານວ່າ ເໝືອນດັ່ງທີ່ຂ້າພະເຈົ້າໄດ້
ຮັບອະນຸຍາດໃຫ້ໃຊ້ວັນເວລາຂອງຂ້າພະເຈົ້າໃນການຮັບໃຊ້
ພວກທ່ານ, ຈົນເຖິງເວລານີ້, ແລະ ບໍ່ໄດ້ສະແຫວງຫາ ຄຳ ຫລື
ເງິນ ຫລື ຂອງມີຄ່າຢ່າງໃດຈາກພວກທ່ານເລີຍ;

ຍ ທັງຂ້າພະເຈົ້າບໍ່ຍອມໃຫ້ພວກທ່ານຕ້ອງຖືກຄຸມຂັງຢູ່ໃນຄຸກ
ມືດ ຫລື ປ່ອຍໃຫ້ພວກທ່ານເປັນຂ້ອຍຂ້າຂອງກັນແລະກັນ,
ຫລື ໃຫ້ພວກທ່ານຂ້າ, ຫລື ປຸ້ນສະດົມ, ຫລື ລັກມັກສົກ, ຫລື
ຫລິ້ນຊູ້; ຫລື ໃຫ້ພວກທ່ານເຮັດຄວາມຊົ່ວຮ້າຍໃດໆ, ແລະ ໄດ້
ສິດສອນພວກທ່ານໃຫ້ຮັກສາພຣະບັນຍັດຂອງພຣະຜູ້ເປັນເຈົ້າ
ໃນທຸກສິ່ງທີ່ພຣະອົງບັນຊາພວກທ່ານ—

And it came to pass that he began to speak to his people from the tower; and they could not all hear his words because of the greatness of the multitude; therefore he caused that the words which he spake should be written and sent forth among those that were not under the sound of his voice, that they might also receive his words.

And these are the words which he spake and caused to be written, saying: My brethren, all ye that have assembled yourselves together, you that can hear my words which I shall speak unto you this day; for I have not commanded you to come up hither to trifle with the words which I shall speak, but that you should hearken unto me, and open your ears that ye may hear, and your hearts that ye may understand, and your minds that the mysteries of God may be unfolded to your view.

I have not commanded you to come up hither that ye should fear me, or that ye should think that I of myself am more than a mortal man.

But I am like as yourselves, subject to all manner of infirmities in body and mind; yet I have been chosen by this people, and consecrated by my father, and was suffered by the hand of the Lord that I should be a ruler and a king over this people; and have been kept and preserved by his matchless power, to serve you with all the might, mind and strength which the Lord hath granted unto me.

I say unto you that as I have been suffered to spend my days in your service, even up to this time, and have not sought gold nor silver nor any manner of riches of you;

Neither have I suffered that ye should be confined in dungeons, nor that ye should make slaves one of another, nor that ye should murder, or plunder, or steal, or commit adultery; nor even have I suffered that ye should commit any manner of wickedness, and have taught you that ye should keep the commandments of the Lord, in all things which he hath commanded you—

ແມ່ນແຕ່ຕົວຂ້າພະເຈົ້າກໍຍັງໄດ້ ເຮັດວຽກດ້ວຍມືຂອງ ຂ້າພະເຈົ້າເອງເພື່ອຈະໄດ້ຮັບໃຊ້ພວກທ່ານ, ແລະ ເພື່ອພວກ ທ່ານຈະບໍ່ຕ້ອງແບກພາລະການເສຍພາສີ, ແລະ ເພື່ອຈະບໍ່ມີ ສິ່ງໃດເກີດກັບພວກທ່ານ ຊຶ່ງເປັນພາລະເຫລືອທີ່ຈະທົນໄດ້— ແລະ ຈາກເລື່ອງທັງໝົດຊຶ່ງຂ້າພະເຈົ້າເວົ້າມານີ້, ທ່ານທຸກຄົນ ເປັນພະຍານຢູ່ໃນມື້ນີ້.

And even I, myself, have labored with mine own hands that I might serve you, and that ye should not be laden with taxes, and that there should nothing come upon you which was grievous to be borne—and of all these things which I have spoken, ye yourselves are witnesses this day.

ເຖິງຢ່າງໃດກໍຕາມ, ພີ່ນ້ອງຂອງຂ້າພະເຈົ້າ, ຂ້າພະເຈົ້າກໍບໍ່ ໄດ້ເຮັດສິ່ງເຫລົ່ານີ້ໄປເພື່ອອວດອ້າງ ທັງຂ້າພະເຈົ້າບໍ່ໄດ້ບອກ ເລື່ອງເຫລົ່ານີ້ເພື່ອກ່າວໂທດພວກທ່ານ; ແຕ່ຂ້າພະເຈົ້າບອກ ພວກທ່ານເຖິງເລື່ອງເຫລົ່ານີ້ ເພື່ອພວກທ່ານຈະໄດ້ຮູ້ວ່າ ຂ້າພະເຈົ້າມີ ຈິດສຳນຶກອັນໃສສະອາດຕໍ່ພຣະພັກຂອງພຣະເຈົ້າ ໃນມື້ນີ້.

Yet, my brethren, I have not done these things that I might boast, neither do I tell these things that thereby I might accuse you; but I tell you these things that ye may know that I can answer a clear conscience before God this day.

ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ເພາະຂ້າພະເຈົ້າ ໄດ້ໃຊ້ວັນເວລາຂອງຂ້າພະເຈົ້າໄປໃນການຮັບໃຊ້ພວກທ່ານ, ຂ້າພະເຈົ້າຈຶ່ງບໍ່ປາດຖະໜາຈະອວດອ້າງ ເພາະຂ້າພະເຈົ້າຢູ່ໃນ ການຮັບໃຊ້ພຣະເຈົ້ານັ້ນເອງ.

Behold, I say unto you that because I said unto you that I had spent my days in your service, I do not desire to boast, for I have only been in the service of God.

ແລະ ຈົ່ງເບິ່ງ, ຂ້າພະເຈົ້າບອກພວກທ່ານເຖິງເລື່ອງເຫລົ່ານີ້ ເພື່ອພວກທ່ານຈະຮຽນຮູ້ກ່ຽວກັບ ປັນຍາ ເພື່ອພວກທ່ານຈະ ຮຽນຮູ້ວ່າ ເມື່ອພວກທ່ານ ຮັບໃຊ້ ເພື່ອນມະນຸດດ້ວຍກັນ ພວກ ທ່ານກໍຮັບໃຊ້ພຣະເຈົ້າຂອງພວກທ່ານນັ້ນເອງ.

And behold, I tell you these things that ye may learn wisdom; that ye may learn that when ye are in the service of your fellow beings ye are only in the service of your God.

ຈົ່ງເບິ່ງ, ພວກທ່ານເອີ້ນຂ້າພະເຈົ້າວ່າກະສັດຂອງພວກ ທ່ານ; ແລະ ຖ້າຂ້າພະເຈົ້າ, ຜູ້ທີ່ພວກທ່ານເອີ້ນວ່າກະສັດຂອງ ພວກທ່ານໄດ້ທຳງານເພື່ອຮັບໃຊ້ພວກທ່ານ, ແລ້ວພວກທ່ານ ຈະບໍ່ທຳງານເພື່ອ ຮັບໃຊ້ຊຶ່ງກັນແລະກັນບໍ?

Behold, ye have called me your king; and if I, whom ye call your king, do labor to serve you, then ought not ye to labor to serve one another?

ແລະ ຈົ່ງເບິ່ງອີກ, ຖ້າຫາກຂ້າພະເຈົ້າຜູ້ທີ່ພວກທ່ານເອີ້ນວ່າ ກະສັດຂອງພວກທ່ານ ຜູ້ທີ່ໃຊ້ວັນເວລາຂອງເພີ່ນໃນການຮັບ ໃຊ້ພວກທ່ານ, ແລະ ຍັງຢູ່ໃນການຮັບໃຊ້ພຣະເຈົ້າ ສົມຄວນ ແລ້ວທີ່ຈະໄດ້ຮັບຄຸນຄວາມດີຈາກພວກທ່ານ, ໂອ້ ພວກທ່ານ ຄວນຈະ ຂອບພຣະໄທກະສັດແຫ່ງສະຫວັນຂອງພວກທ່ານ ຫລາຍປານໃດນໍ!

And behold also, if I, whom ye call your king, who has spent his days in your service, and yet has been in the service of God, do merit any thanks from you, O how you ought to thank your heavenly King!

ຂ້າພະເຈົ້າຂໍກ່າວກັບທ່ານທັງຫລາຍພີ່ນ້ອງຂອງຂ້າພະເຈົ້າ ວ່າ ຖ້າຫາກພວກທ່ານຈະຖວາຍຄວາມຂອບພຣະໄທ ແລະ ສັນລະເສີນທັງໝົດ ຊຶ່ງທັງຈິດວິນຍານຂອງພວກທ່ານມີ ອຳນາດເປັນເຈົ້າຂອງແດ່ ພຣະເຈົ້າຜູ້ໄດ້ສ້າງພວກທ່ານ, ແລະ ຮັກສາ, ແລະ ປົກປ້ອງພວກທ່ານມາແລ້ວ, ແລະ ເຮັດໃຫ້ພວກ ທ່ານປິຕິຍິນດີ ແລະ ເຮັດໃຫ້ພວກທ່ານຢູ່ນຳກັນດ້ວຍສັນຕິສຸກ —

I say unto you, my brethren, that if you should render all the thanks and praise which your whole soul has power to possess, to that God who has created you, and has kept and preserved you, and has caused that ye should rejoice, and has granted that ye should live in peace one with another—

ຂ້າພະເຈົ້າຂໍກ່າວກັບພວກທ່ານວ່າ ຖ້າຫາກພວກທ່ານຈະ ຮັບໃຊ້ພຣະອົງຜູ້ໄດ້ສ້າງພວກທ່ານມາຕັ້ງແຕ່ຕົ້ນ, ແລະ ປົກປ້ອງພວກທ່ານແຕ່ລະມື້ໂດຍໃຫ້ພວກທ່ານຢືມລົມຫາຍໃຈ ເພື່ອພວກທ່ານຈະມີຊີວິດ ແລະ ເຄື່ອນໄຫວ ແລະ ເຮັດຕາມ ຈຸດປະສົງຂອງພວກທ່ານເອງ, ແລະ ຄ້ຳຊູພວກທ່ານແຕ່ລະມື້ —ຂ້າພະເຈົ້າເວົ້າວ່າ ຖ້າຫາກພວກທ່ານຮັບໃຊ້ພຣະອົງດ້ວຍ ສຸດຈິດວິນຍານຂອງພວກທ່ານ ແຕ່ພວກທ່ານກໍຍັງຄົງເປັນ ຜູ້ຮັບໃຊ້ທີ່ ບໍ່ສົມຄ່າຢູ່.

I say unto you that if ye should serve him who has created you from the beginning, and is preserving you from day to day, by lending you breath, that ye may live and move and do according to your own will, and even supporting you from one moment to another—I say, if ye should serve him with all your whole souls yet ye would be unprofitable servants.

ແລະ ຈົ່ງເບິ່ງ, ທັງໝົດທີ່ພຣະອົງຕ້ອງການຈາກພວກທ່ານ ຄື ໃຫ້ ຮັກສາ ພຣະບັນຍັດຂອງພຣະອົງ ແລະ ພຣະອົງສັນຍາ ກັບພວກທ່ານວ່າ ຖ້າຫາກພວກທ່ານຈະຮັກສາພຣະບັນຍັດ ຂອງພຣະອົງ ພວກທ່ານຈະຮຸ່ງເຮືອງຢູ່ໃນແຜ່ນດິນນີ້; ແລະ ພຣະອົງບໍ່ເຄີຍ ປ່ຽນແປງໄປຈາກສິ່ງທີ່ພຣະອົງຮັບສັ່ງໄວ້; ສະນັ້ນ, ຖ້າຫາກພວກທ່ານຈະ ຮັກສາພຣະບັນຍັດຂອງ ພຣະອົງ, ພຣະອົງຈະປະທານພອນໃຫ້ແກ່ພວກທ່ານ ແລະ ເຮັດໃຫ້ພວກທ່ານຮຸ່ງເຮືອງ.

And behold, all that he requires of you is to keep his commandments; and he has promised you that if ye would keep his commandments ye should prosper in the land; and he never doth vary from that which he hath said; therefore, if ye do keep his commandments he doth bless you and prosper you.

ແລະ ບັດນີ້ປະການທຳອິດຄື ພຣະອົງໄດ້ສ້າງພວກທ່ານມາ, ແລະ ໄດ້ປະທານຊີວິດໃຫ້ແກ່ພວກທ່ານ, ຍ້ອນເຫດນີ້ພວກ ທ່ານຈຶ່ງເປັນໜີ້ພຣະອົງ.

And now, in the first place, he hath created you, and granted unto you your lives, for which ye are indebted unto him.

ແລະ ປະການທີສອງຄື ພຣະອົງຕ້ອງການໃຫ້ພວກທ່ານ ກະທຳຕາມທີ່ພຣະອົງບັນຊາພວກທ່ານໄວ້; ຖ້າຫາກພວກ ທ່ານເຮັດຕາມນີ້, ພຣະອົງຈະປະທານ ພອນໃຫ້ພວກທ່ານ ໂດຍທັນທີ. ແລະ ສະນັ້ນ ພຣະອົງຈະຈ່າຍຄ່າຈ້າງໃຫ້ແກ່ພວກ ທ່ານ, ແລ້ວພວກທ່ານກໍຍັງຄົງເປັນໜີ້ພຣະອົງຢູ່ໃນຕອນນີ້ ແລະ ຕະຫລອດໄປບໍ່ມີວັນສິ້ນສຸດ; ສະນັ້ນ, ພວກທ່ານຈະ ອວດອ້າງໄປເຮັດຫຍັງ?

And secondly, he doth require that ye should do as he hath commanded you; for which if ye do, he doth immediately bless you; and therefore he hath paid you. And ye are still indebted unto him, and are, and will be, forever and ever; therefore, of what have ye to boast?

ແລະ ບັດນີ້ຂ້າພະເຈົ້າຂໍຖາມວ່າ ພວກທ່ານສາມາດເວົ້າ ກ່ຽວກັບຕົວເອງໄດ້ບໍ? ຂ້າພະເຈົ້າຂໍຕອບພວກທ່ານວ່າ, ບໍ່ໄດ້. ພວກທ່ານບໍ່ສາມາດເວົ້າວ່າ ພວກທ່ານມີຄ່າເທົ່າກັບຂີ້ຝຸ່ນ; ເຖິງແມ່ນວ່າພວກທ່ານຖືກ ສ້າງມາຈາກ ຂີ້ຝຸ່ນກໍຕາມ; ເພາະ ຈົ່ງເບິ່ງ, ມັນເປັນຂອງພຣະອົງຜູ້ສ້າງພວກທ່ານມາ.

And now I ask, can ye say aught of yourselves? I answer you, Nay. Ye cannot say that ye are even as much as the dust of the earth; yet ye were created of the dust of the earth; but behold, it belongeth to him who created you.

ແລະ ຂ້າພະເຈົ້າເຖິງແມ່ນວ່າຂ້າພະເຈົ້ານີ້, ຜູ້ທີ່ພວກທ່ານ ເອີ້ນວ່າກະສັດຂອງພວກທ່ານກໍບໍ່ດີໄປກວ່າຕົວຂອງພວກທ່ານ ເລີຍ; ເພາະຂ້າພະເຈົ້າມາຈາກຂີ້ຝຸ່ນເໝືອນກັນ. ແລະ ພວກ ທ່ານເຫັນວ່າຂ້າພະເຈົ້າເຖົ້າແກ່, ແລະ ຮ່າງກາຍທີ່ເປັນມະຕະນີ້ ກຳລັງຈະຖືກສົ່ງຄືນໃຫ້ແກ່ແຜ່ນດິນທີ່ໃຫ້ກຳເນີດມັນມາ.

And I, even I, whom ye call your king, am no better than ye yourselves are; for I am also of the dust. And ye behold that I am old, and am about to yield up this mortal frame to its mother earth.

ᩋᩅ ສະນັ້ນ, ເໝືອນດັ່ງທີ່ຂ້າພະເຈົ້າໄດ້ເວົ້າກັບພວກທ່ານມາ ແລ້ວ, ຂ້າພະເຈົ້າໄດ້ຮັບໃຊ້ພວກທ່ານໂດຍ ເດີນໄປດ້ວຍຈິດ ສຳນຶກອັນໃສສະອາດຕໍ່ພຣະພັກຂອງພຣະເຈົ້າ, ເປັນຍ້ອນແນວ ນີ້ແລ້ວທີ່ຂ້າພະເຈົ້າໄດ້ໃຫ້ພວກທ່ານມາຊຸມນຸມກັນຢູ່ໃນເວລານີ້ ກໍເພື່ອຈະໄດ້ເຫັນວ່າຂ້າພະເຈົ້າຈະບໍ່ມີຂໍ້ຕຳນິ, ແລະ ເພື່ອ ເລືອດ ຂອງພວກທ່ານຈະບໍ່ມາຕົດຢູ່ນຳຂ້າພະເຈົ້າເມື່ອຂ້າພະເຈົ້າຢືນຢູ່ ເພື່ອຮັບການພິພາກສາຂອງພຣະເຈົ້າໃນເລື່ອງທີ່ພຣະອົງ ບັນຊາຂ້າພະເຈົ້າໄວ້ກ່ຽວກັບພວກທ່ານ.

ᩋᩈ ຂ້າພະເຈົ້າເວົ້າກັບພວກທ່ານອີກว່າ ຂ້າພະເຈົ້າໄດ້ໃຫ້ພວກ ທ່ານມາຊຸມນຸມກັນ ເພື່ອຂ້າພະເຈົ້າຈະໄດ້ ກຳຈັດເລືອດຂອງ ພວກທ່ານອອກຈາກອາພອນຂອງຂ້າພະເຈົ້າໃນໄລຍະເວລານີ້ ຕອນທີ່ຂ້າພະເຈົ້າກຳລັງຈະລົງໄປຫາຫລຸມຝັງສົບຂອງ ຂ້າພະເຈົ້າ ເພື່ອຂ້າພະເຈົ້າຈະໄດ້ລົງໄປດ້ວຍສັນຕິສຸກ, ແລະ ວິນຍານທີ່ເປັນອະມະຕະຂອງຂ້າພະເຈົ້າຈະໄດ້ເຂົ້າຮ່ວມກັບ ຜູ້ ທີ່ຮ້ອງເພງຢູ່ເບື້ອງເທິງເພື່ອສັນລະເສີນພຣະເຈົ້າຜູ້ທ່ຽງທຳ.

ᩋᩉ ແລະ ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າເວົ້າກັບພວກທ່ານອີກว່າ ຂ້າພະເຈົ້າໃຫ້ພວກທ່ານມາຊຸມນຸມກັນນີ້ ເພື່ອຂ້າພະເຈົ້າຈະໄດ້ ປະກາດແກ່ພວກທ່ານว່າ, ຂ້າພະເຈົ້າຈະບໍ່ໄດ້ເປັນຜູ້ສອນ ຫລື ເປັນກະສັດຂອງພວກທ່ານຕໍ່ໄປອີກແລ້ວ;

ᩋᩌᩐ ເພາະແມ່ນແຕ່ຕອນນີ້ຮ່າງກາຍທັງໝົດຂອງຂ້າພະເຈົ້າກໍສັ່ນ ສາຍຢ່າງຍິ່ງຂະນະທີ່ຂ້າພະເຈົ້າພະຍາຍາມເວົ້າກັບພວກທ່ານ; ແຕ່ອົງພຣະຜູ້ເປັນເຈົ້າຍັງຄ້ຳຊູຂ້າພະເຈົ້າໄວ້, ແລະ ຍອມໃຫ້ ຂ້າພະເຈົ້າເວົ້າກັບພວກທ່ານ, ແລະ ບັນຊາຂ້າພະເຈົ້າໃຫ້ ປະກາດແກ່ພວກທ່ານໃນມື້ນີ້ว່າ ໂມໄຊຢາລູກຊາຍຂອງ ຂ້າພະເຈົ້າຈະເປັນກະສັດ ແລະ ເປັນຜູ້ປົກຄອງດູແລພວກ ທ່ານ.

ᩋᩑᩑ ແລະ ບັດນີ້ພີ່ນ້ອງຂອງຂ້າພະເຈົ້າ, ຂ້າພະເຈົ້າຢາກໃຫ້ພວກ ທ່ານເຮັດດັ່ງທີ່ພວກທ່ານໄດ້ເຮັດມາເໝືອນແຕ່ກ່ອນ. ພວກ ທ່ານໄດ້ຮັກສາບັນຍັດຂອງຂ້າພະເຈົ້າ, ແລະ ບັນຍັດຂອງບິດາ ຂອງຂ້າພະເຈົ້າ, ແລະ ໄດ້ຮຸ່ງເຮືອງມາ, ແລະ ໄດ້ຮັບການຮັກສາ ບໍ່ໃຫ້ຕົກຢູ່ໃນກຳມືຂອງສັດຕູຂອງພວກທ່ານ, ຖ້າຫາກພວກ ທ່ານຈະຮັກສາບັນຍັດຂອງລູກຊາຍຂອງຂ້າພະເຈົ້າ ຫລື ພຣະບັນຍັດຂອງພຣະເຈົ້າ ຊຶ່ງພວກທ່ານຈະໄດ້ຮັບຈາກລາວ, ພວກທ່ານຈະມີຄວາມຮຸ່ງເຮືອງຢູ່ໃນແຜ່ນດິນນີ້, ແລະ ສັດຕູ ຂອງພວກທ່ານຈະບໍ່ມີອຳນາດ ເໝືອກว່າພວກທ່ານເລີຍ.

ᩋᩑᩖ ແຕ່, ໂອ້ ຜູ້ຄົນຂອງຂ້າພະເຈົ້າ, ຈົ່ງລະວັງ ເພາະຢ້ານว່ານັ້ນ ຈະເກີດມີ ການຂັດແຍ້ງກັນຂຶ້ນໃນບັນດາພວກທ່ານ, ແລະ ພວກທ່ານຈົ່ງຢ່າສູ່ໄດ້ເລືອກເຊື່ອຟັງວິນຍານຊົ່ວ, ຊຶ່ງໂມໄຊຢາ ບິດາຂອງຂ້າພະເຈົ້າໄດ້ເວົ້າເຖິງ.

Therefore, as I said unto you that I had served you, walking with a clear conscience before God, even so I at this time have caused that ye should assemble yourselves together, that I might be found blameless, and that your blood should not come upon me, when I shall stand to be judged of God of the things whereof he hath commanded me concerning you.

I say unto you that I have caused that ye should assemble yourselves together that I might rid my garments of your blood, at this period of time when I am about to go down to my grave, that I might go down in peace, and my immortal spirit may join the choirs above in singing the praises of a just God.

And moreover, I say unto you that I have caused that ye should assemble yourselves together, that I might declare unto you that I can no longer be your teacher, nor your king;

For even at this time, my whole frame doth tremble exceedingly while attempting to speak unto you; but the Lord God doth support me, and hath suffered me that I should speak unto you, and hath commanded me that I should declare unto you this day, that my son Mosiah is a king and a ruler over you.

And now, my brethren, I would that ye should do as ye have hitherto done. As ye have kept my commandments, and also the commandments of my father, and have prospered, and have been kept from falling into the hands of your enemies, even so if ye shall keep the commandments of my son, or the commandments of God which shall be delivered unto you by him, ye shall prosper in the land, and your enemies shall have no power over you.

But, O my people, beware lest there shall arise contentions among you, and ye list to obey the evil spirit, which was spoken of by my father Mosiah.

ນ໓ນ ເພາະຈົ່ງເບິ່ງ, ມີວິບັດຢ່າງໜຶ່ງຊຶ່ງກຳນົດໃຫ້ເກີດກັບຄົນທີ່ເລືອກເຊື່ອຟັງວິນຍານນັ້ນ; ເພາະຖ້າຫາກເຂົາເລືອກເຊື່ອຟັງມັນ, ແລະ ຄົງຢູ່ໃນຄວາມຊົ່ວຮ້າຍ, ແລະ ຕາຍໃນບາບຂອງເຂົາແລ້ວ ຜູ້ນັ້ນຍ່ອມດື່ມ ຄວາມອັບປະໂຫຍດເຂົ້າໄປໃນຈິດວິນຍານຂອງເຂົາເອງ; ເພາະວ່າເຂົາຕ້ອງໄດ້ຮັບໂທດ ອັນເປັນນິດທີ່ເປັນຄ່າຈ້າງຂອງເຂົາໂດຍການລ່ວງລະເມີດກົດຂອງພຣະເຈົ້າອັນເປັນການກົງກັນຂ້າມກັບຄວາມຮູ້ຂອງເຂົາເອງ.

For behold, there is a wo pronounced upon him who listeth to obey that spirit; for if he listeth to obey him, and remaineth and dieth in his sins, the same drinketh damnation to his own soul; for he receiveth for his wages an everlasting punishment, having transgressed the law of God contrary to his own knowledge.

ນ໓ສ ຂ້າພະເຈົ້າກ່າວກັບພວກທ່ານອີກว่า ບໍ່ມີໃຜເລີຍໃນບັນດາພວກທ່ານນອກຈາກເດັກນ້ອຍໆຂອງພວກທ່ານທີ່ບໍ່ໄດ້ຮັບການສິດສອນກ່ຽວກັບເລື່ອງເຫລົ່ານີ້ ທີ່ບໍ່ຮູ້ຈັກว่าພວກທ່ານເປັນໜີ້ມາຕະຫລອດການຕໍ່ພຣະບິດາເທິງສະຫວັນຂອງພວກທ່ານ ທີ່ຈະຖວາຍທຸກສິ່ງທີ່ພວກທ່ານມີຢູ່ ແລະ ເປັນຢູ່ໃຫ້ແກ່ພຣະອົງ, ແລະ ໄດ້ຮັບການສິດສອນກ່ຽວກັບບັນທຶກ ຊຶ່ງມີການທຳນາຍທີ່ສາດສະດາບໍລິສຸດໄດ້ເວົ້າໄວ້ ຈົນເຖິງເວລາທີ່ລີໄຮ ບັນພະບຸລຸດຂອງພວກເຮົາໄດ້ຈາກເຢຣູຊາເລັມມາ;

I say unto you, that there are not any among you, except it be your little children that have not been taught concerning these things, but what knoweth that ye are eternally indebted to your heavenly Father, to render to him all that you have and are; and also have been taught concerning the records which contain the prophecies which have been spoken by the holy prophets, even down to the time our father, Lehi, left Jerusalem;

ນ໓ຫ ແລະ ທຸກສິ່ງທີ່ໄດ້ບອກຕະຫລອດມານັບຕັ້ງແຕ່ບັນພະບຸລຸດຂອງພວກເຮົາຈົນເຖິງເວລານີ້ນຳອີກ. ແລະ ຈົ່ງເບິ່ງ, ຄົນເຫລົ່ານັ້ນໄດ້ເວົ້າເຖິງສິ່ງທີ່ພຣະຜູ້ເປັນເຈົ້າບັນຊາພວກເພີ່ນນຳອີກ; ສະນັ້ນ, ມັນຈຶ່ງເປັນສິ່ງຊອບທຳ ແລະ ເປັນຄວາມຈິງ.

And also, all that has been spoken by our fathers until now. And behold, also, they spake that which was commanded them of the Lord; therefore, they are just and true.

ນ໓ຈ ແລະ ບັດນີ້ພີ່ນ້ອງຂອງຂ້າພະເຈົ້າ, ຂ້າພະເຈົ້າເວົ້າກັບພວກທ່ານว่า ຫລັງຈາກພວກທ່ານຮູ້ ແລະ ໄດ້ຮັບການສິດສອນໃນເລື່ອງທັງໝົດນີ້ແລ້ວ, ຖ້າຫາກພວກທ່ານຍັງຈະລ່ວງລະເມີດ ແລະ ເຮັດກົງກັນຂ້າມກັບສິ່ງທີ່ໄດ້ເວົ້າໄວ້, ພວກທ່ານຖອນຕົວອອກໄປຈາກພຣະວິນຍານຂອງພຣະຜູ້ເປັນເຈົ້າ, ຈົນว่ามັນບໍ່ມີບ່ອນໃດເລີຍໃນພວກທ່ານ ທີ່ຈະສາມາດນຳພວກທ່ານໄປໃນທາງແຫ່ງປັນຍາເພື່ອພວກທ່ານຈະໄດ້ຮັບພອນ, ຈະເລີນຮຸ່ງເຮືອງ, ແລະ ຮັບການປົກປັກຮັກສາ—

And now, I say unto you, my brethren, that after ye have known and have been taught all these things, if ye should transgress and go contrary to that which has been spoken, that ye do withdraw yourselves from the Spirit of the Lord, that it may have no place in you to guide you in wisdom's paths that ye may be blessed, prospered, and preserved—

ນ໓ຊ ຂ້າພະເຈົ້າເວົ້າກັບພວກທ່ານว่า, ຜູ້ໃດທີ່ກະທຳແບບນີ້, ຜູ້ນັ້ນຍ່ອມອອກມາໃນ ການກະບົດຕໍ່ພຣະເຈົ້າຢ່າງເປີດເຜີຍ; ສະນັ້ນ, ເຂົາຈຶ່ງເລືອກເຊື່ອຟັງວິນຍານຊົ່ວ ແລະ ກັບເປັນສັດຕູຕໍ່ຄວາມຊອບທຳທັງໝົດ; ສະນັ້ນ, ພຣະຜູ້ເປັນເຈົ້າຈຶ່ງບໍ່ມີບ່ອນຢູ່ໃນຕົວເຂົາ, ເພາະພຣະອົງຈະບໍ່ສະຖິດຢູ່ໃນວິຫານທີ່ ບໍ່ບໍລິສຸດ.

I say unto you, that the man that doeth this, the same cometh out in open rebellion against God; therefore he listeth to obey the evil spirit, and becometh an enemy to all righteousness; therefore, the Lord has no place in him, for he dwelleth not in unholy temples.

ມ໗ ສະນັ້ນ ຖ້າຫາກຄົນນັ້ນບໍ່ ກັບໃຈ ແລະ ຄົງຢູ່ ແລະ ຕາຍໂດຍ ເປັນສັດຕູກັບພຣະເຈົ້າ, ແລ້ວ ຄວາມຍຸດຕິທຳແຫ່ງສະຫວັນຈະ ປຸກຈິດວິນຍານອັນເປັນອະມະຕະຂອງເຂົາໃຫ້ຕື່ນຂຶ້ນມາຫາ ຄວາມຮູ້ສຶກໃນ ຄວາມຜິດທີ່ຮຸນແຮງຂອງຕົນເອງ, ຊຶ່ງເຮັດໃຫ້ ເຂົາຖອຍອອກໄປຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ, ແລະ ເຮັດໃຫ້ອົກຂອງເຂົາເຕັມໄປດ້ວຍຄວາມຮູ້ສຶກຜິດ, ແລະ ຄວາມ ເຈັບປວດ, ແລະ ຄວາມທຸກທໍລະມານ, ຊຶ່ງປຽບເໝືອນດັ່ງໄຟທີ່ ບໍ່ຮູ້ມອດ, ຊຶ່ງແປວໄຟນັ້ນລອຍຂຶ້ນຢູ່ຕະຫລອດການ ແລະ ຕະຫລອດໄປ.

Therefore if that man repenteth not, and remaineth and dieth an enemy to God, the demands of divine justice do awaken his immortal soul to a lively sense of his own guilt, which doth cause him to shrink from the presence of the Lord, and doth fill his breast with guilt, and pain, and anguish, which is like an unquenchable fire, whose flame ascendeth up forever and ever.

ມ໗ ແລະ ບັດນີ້ຂ້າພະເຈົ້າເວົ້າກັບພວກທ່ານວ່າ ຜູ້ນັ້ນຈະບໍ່ໄດ້ ຮັບ ຄວາມເມດຕາເລີຍ; ສະນັ້ນຊາຕາກຳໃນວາລະສຸດທ້າຍຂອງ ເຂົາຄື ຄວາມທຸກທໍລະມານທີ່ບໍ່ມີວັນສິ້ນສຸດ.

And now I say unto you, that mercy hath no claim on that man; therefore his final doom is to endure a never-ending torment.

ແ໐ ໂອ້, ພວກທ່ານຜູ້ມີອາຍຸສູງທັງຫລາຍ, ແລະ ພວກເຈົ້າຜູ້ ໜຸ່ມແຫ້ນ, ແລະ ພວກເຈົ້າຜູ້ເປັນເດັກນ້ອຍໆ ຜູ້ທີ່ສາມາດ ເຂົ້າໃຈຂໍ້ຄວາມຂອງຂ້າພະເຈົ້າ, ເພາະຂ້າພະເຈົ້າໄດ້ເວົ້າຢ່າງ ແຈ່ມແຈ້ງເພື່ອພວກທ່ານຈະໄດ້ເຂົ້າໃຈ, ຂ້າພະເຈົ້າໄດ້ອະທິຖານ ແທນພວກທ່ານ ເພື່ອພວກທ່ານຈະໄດ້ຕື່ນຂຶ້ນມາຫາ ຄວາມຊົງ ຈຳເຖິງສະພາບອັນເປັນຕາຢ້ານຂອງຄົນທີ່ຕົກຢູ່ໃນການລ່ວງ ລະເມີດ.

O, all ye old men, and also ye young men, and you little children who can understand my words, for I have spoken plainly unto you that ye might understand, I pray that ye should awake to a remembrance of the awful situation of those that have fallen into transgression.

ແ໑ ແລະ ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າປາດຖະໜາໃຫ້ພວກທ່ານ ພິຈາລະນາເຖິງສະພາບອັນເປັນພອນ ແລະ ຄວາມສຸກຂອງຄົນ ທີ່ຮັກສາພຣະບັນຍັດຂອງພຣະເຈົ້າ. ເພາະຈົ່ງເບິ່ງ, ເຂົາໄດ້ ຮັບ ພອນທຸກຢ່າງ ທັງຝ່າຍໂລກ ແລະ ຝ່າຍວິນຍານ; ແລະ ຖ້າ ຫາກເຂົາອົດທົນຢ່າງ ຊື່ສັດຈົນເຖິງທີ່ສຸດແລ້ວ, ເຂົາຈະຖືກຮັບ ເຂົ້າສູ່ ສະຫວັນ, ແລ້ວເຂົາຈະໄດ້ຢູ່ກັບພຣະເຈົ້າໃນສະພາບແຫ່ງ ຄວາມສຸກທີ່ບໍ່ມີວັນສິ້ນສຸດ. ໂອ້ ຈົ່ງຈື່ຈຳ, ຈົ່ງຈື່ຈຳໄວ້ວ່າ ເລື່ອງ ເຫລົ່ານີ້ເປັນຄວາມຈິງ; ເພາະອົງພຣະຜູ້ເປັນເຈົ້າໄດ້ກ່າວໄວ້.

And moreover, I would desire that ye should consider on the blessed and happy state of those that keep the commandments of God. For behold, they are blessed in all things, both temporal and spiritual; and if they hold out faithful to the end they are received into heaven, that thereby they may dwell with God in a state of never-ending happiness. O remember, remember that these things are true; for the Lord God hath spoken it.

ໂມໄຊຢາ ມ

Mosiah 3

ມ ๑ ແລະ ອີກຢ່າງໜຶ່ງພີ່ນ້ອງຂອງຂ້າພະເຈົ້າ, ຂ້າພະເຈົ້າຢາກໃຫ້ພວກທ່ານຕັ້ງໃຈຟັງ, ເພາະວ່າຂ້າພະເຈົ້າຍັງມີສິ່ງທີ່ຈະກ່າວກັບພວກທ່ານອີກ; ເພາະຈົ່ງເບິ່ງ, ຂ້າພະເຈົ້າມີເລື່ອງຈະບອກພວກທ່ານກ່ຽວກັບສິ່ງທີ່ຈະມາເຖິງ.

And again my brethren, I would call your attention, for I have somewhat more to speak unto you; for behold, I have things to tell you concerning that which is to come.

ມ ๒ ແລະ ເລື່ອງທີ່ຂ້າພະເຈົ້າຈະບອກພວກທ່ານນັ້ນແມ່ນກ່ຽວກັບ ທູດອົງໜຶ່ງ ຊຶ່ງຈາກພຣະເຈົ້າມາ ແລະ ເຮັດໃຫ້ຂ້າພະເຈົ້າຮູ້ຈັກ. ແລະ ເພິ່ນໄດ້ກ່າວກັບຂ້າພະເຈົ້າວ່າ: ຈົ່ງຕື່ນເຖີດ, ແລະ ຂ້າພະເຈົ້າໄດ້ຕື່ນຂຶ້ນ, ແລະ ຈົ່ງເບິ່ງ ເພິ່ນໄດ້ຢືນຢູ່ຕໍ່ໜ້າຂ້າພະເຈົ້າ.

And the things which I shall tell you are made known unto me by an angel from God. And he said unto me: Awake; and I awoke, and behold he stood before me.

ມ ๓ ແລະ ເພິ່ນໄດ້ກ່າວກັບຂ້າພະເຈົ້າວ່າ: ຈົ່ງຕື່ນເຖີດ, ແລະ ຈົ່ງຟັງຄຳທີ່ຂ້າພະເຈົ້າຈະບອກທ່ານ; ເພາະຈົ່ງເບິ່ງ, ຂ້າພະເຈົ້າມາເພື່ອປະກາດຂ່າວ ອັນໜ້າຊື່ນຊົມແຫ່ງຄວາມສຸກອັນຍິ່ງໃຫຍ່ຕໍ່ທ່ານ.

And he said unto me: Awake, and hear the words which I shall tell thee; for behold, I am come to declare unto you the glad tidings of great joy.

ມ ๔ ເພາະພຣະຜູ້ເປັນເຈົ້າໄດ້ຍິນຄຳອະທິຖານຂອງທ່ານແລ້ວ, ແລະ ໄດ້ພິຈາລະນາຄວາມຊອບທຳຂອງທ່ານ, ແລະ ໄດ້ສັ່ງຂ້າພະເຈົ້າໃຫ້ມາເພື່ອປະກາດກັບທ່ານວ່າ ທ່ານຈົ່ງປິຕິຍິນດີເຖີດ; ແລະ ວ່າໃຫ້ທ່ານປະກາດກັບຜູ້ຄົນຂອງທ່ານເພື່ອພວກເຂົາຈະເຕັມໄປດ້ວຍຄວາມສຸກເຊັ່ນດຽວກັນ.

For the Lord hath heard thy prayers, and hath judged of thy righteousness, and hath sent me to declare unto thee that thou mayest rejoice; and that thou mayest declare unto thy people, that they may also be filled with joy.

ມ ๕ ເພາະຈົ່ງເບິ່ງ, ເວລາຈະມາເຖິງ, ແລະ ຍັງອີກບໍ່ຄົນ, ຊຶ່ງພ້ອມດ້ວຍອຳນາດຂອງ ພຣະຜູ້ເປັນເຈົ້າອົງຊົງລິດອຳນາດຍິ່ງໃຫຍ່, ຜູ້ຄອບຄອງ, ຜູ້ເປັນມາແລ້ວ ແລະ ເປັນຢູ່ຈາກຊົ່ວນິລັນດອນເຖິງຊົ່ວນິລັນດອນ ຈະສະເດັດຈາກສະຫວັນລົງມາຢູ່ໃນບັນດາລູກຫລານມະນຸດ, ແລະ ຈະຢູ່ໃນ ຮ່າງກາຍທີ່ເຮັດດ້ວຍດິນໜຽວ, ແລະ ຈະສະເດັດອອກໄປໃນບັນດາມະນຸດ ແລະ ເຮັດ ສິ່ງມະຫັດສະຈັນອັນຍິ່ງໃຫຍ່ເຊັ່ນ ປິ່ນປົວຄົນເຈັບປ່ວຍ, ເຮັດໃຫ້ຄົນຕາຍຄືນມີຊີວິດ, ເຮັດໃຫ້ຄົນເປ້ຍລ່ອຍຍ່າງໄດ້, ຄົນຕາບອດເຫັນຮຸ່ງ, ແລະ ຄົນຫູໜວກໄດ້ຍິນ, ແລະ ປິ່ນປົວພະຍາດທຸກຢ່າງ.

For behold, the time cometh, and is not far distant, that with power, the Lord Omnipotent who reigneth, who was, and is from all eternity to all eternity, shall come down from heaven among the children of men, and shall dwell in a tabernacle of clay, and shall go forth amongst men, working mighty miracles, such as healing the sick, raising the dead, causing the lame to walk, the blind to receive their sight, and the deaf to hear, and curing all manner of diseases.

ມ ๖ ແລະ ພຣະອົງຈະຂັບໄລ່ ຜີປີສາດ ຫລື ວິນຍານຊົ່ວທີ່ຢູ່ໃນໃຈຂອງລູກຫລານມະນຸດໃຫ້ອອກໄປ.

And he shall cast out devils, or the evil spirits which dwell in the hearts of the children of men.

ມ ๗ ແລະ ແລ້ວພຣະອົງຈະອົດທົນຕໍ່ ການລໍ້ລວງ, ແລະ ຄວາມເຈັບປວດທາງຮ່າງກາຍ, ແລະ ອົດທົນຕໍ່ຄວາມ ຫິວເຂົ້າ, ຄວາມກະຫາຍນ້ຳ, ແລະ ຄວາມອິດເມື່ອຍຫລາຍກວ່າມະນຸດຈະ ທົນໄດ້, ນອກຈາກຈະເຖິງແກ່ຄວາມຕາຍ; ເພາະຈົ່ງເບິ່ງ, ຄວາມເຈັບປວດຂອງພຣະອົງຈະໃຫຍ່ຫລວງທີ່ສຸດຈົນ ໂລຫິດໄຫລອອກຈາກທຸກຂຸມຂົນ, ເພາະຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງຜູ້ຄົນຂອງພຣະອົງ.

And lo, he shall suffer temptations, and pain of body, hunger, thirst, and fatigue, even more than man can suffer, except it be unto death; for behold, blood cometh from every pore, so great shall be his anguish for the wickedness and the abominations of his people.

໘ ແລະ ພຣະອົງຈະໄດ້ຮັບພຣະນາມວ່າ ພຣະເຢຊູຄຣິດ, ພຣະບຸດຂອງພຣະເຈົ້າ, ພຣະບິດາແຫ່ງສະຫວັນ ແລະ ແຜ່ນດິນໂລກ, ພຣະຜູ້ສ້າງທຸກສິ່ງຕັ້ງແຕ່ຕົ້ນ; ແລະ ມານດາຂອງພຣະອົງຈະມີຊື່ວ່າ ມາຣີ.

And he shall be called Jesus Christ, the Son of God, the Father of heaven and earth, the Creator of all things from the beginning; and his mother shall be called Mary.

໙ ແລະ ແລ້ວພຣະອົງຈະສະເດັດໄປຫາຜູ້ຄົນຂອງພຣະອົງເພື່ອຄວາມລອດຈະໄດ້ມາເຖິງລູກຫລານມະນຸດ ເຖິງແມ່ນໂດຍທາງສັດທາໃນພຣະນາມຂອງພຣະອົງ; ແລະ ເຖິງແມ່ນຫລັງຈາກທັງໝົດນີ້ແລ້ວ ພວກເຂົາກໍຈະຖືວ່າ ພຣະອົງເປັນມະນຸດທຳມະດາຜູ້ໜຶ່ງ, ແລະ ກ່າວວ່າມີ ຜີສິງຢູ່ໃນພຣະອົງ, ແລະ ຈະຂ້ຽນຕີພຣະອົງ, ແລະ ຈະ ຄຶງພຣະອົງໄວ້ເທິງໄມ້ກາງແຂນ.

And lo, he cometh unto his own, that salvation might come unto the children of men even through faith on his name; and even after all this they shall consider him a man, and say that he hath a devil, and shall scourge him, and shall crucify him.

໑໐ ແລະ ໃນມື້ ທີສາມພຣະອົງຈະ ລຸກຂຶ້ນຈາກຄວາມຕາຍ; ແລະ ຈົ່ງເບິ່ງ, ພຣະອົງຈະປະທັບຢືນຢູ່ເພື່ອ ພິພາກສາໂລກ; ແລະ ຈົ່ງເບິ່ງ, ເລື່ອງທັງໝົດນີ້ຈະເປັນໄປເພື່ອການພິພາກສາອັນຊອບທຳຈະໄດ້ມາເຖິງລູກຫລານມະນຸດ.

And he shall rise the third day from the dead; and behold, he standeth to judge the world; and behold, all these things are done that a righteous judgment might come upon the children of men.

໑໑ ເພາະຈົ່ງເບິ່ງ, ແລະ ໂລຫິດຂອງພຣະອົງຈະ ຊົດໃຊ້ແທນບາບຂອງຄົນທີ່ ຕົກໄປຍ້ອນການລ່ວງລະເມີດຂອງອາດາມນຳອີກ, ຜູ້ທີ່ຕາຍໂດຍບໍ່ຮູ້ຈັກພຣະປະສົງຂອງພຣະເຈົ້າກ່ຽວກັບພວກເຂົາ, ຫລື ຜູ້ທີ່ເຮັດບາບ ໂດຍບໍ່ຮູ້.

For behold, and also his blood atoneth for the sins of those who have fallen by the transgression of Adam, who have died not knowing the will of God concerning them, or who have ignorantly sinned.

໑໒ ແຕ່ວິບັດ, ວິບັດແກ່ຜູ້ທີ່ຮູ້ວ່າຕົນ ກະບົດຕໍ່ພຣະເຈົ້າ! ເພາະຄວາມລອດຈະບໍ່ມາຫາຄົນແນວນັ້ນ ນອກຈາກຈະເປັນໂດຍທາງການກັບໃຈ ແລະ ມີສັດທາໃນ ອົງພຣະເຢຊູຄຣິດເຈົ້າເທົ່ານັ້ນ.

But wo, wo unto him who knoweth that he rebelleth against God! For salvation cometh to none such except it be through repentance and faith on the Lord Jesus Christ.

໑໓ ແລະ ອົງພຣະຜູ້ເປັນເຈົ້າໄດ້ສົ່ງສາດສະດາຜູ້ບໍລິສຸດຂອງພຣະອົງມາໃນບັນດາລູກຫລານມະນຸດທັງປວງ ເພື່ອປະກາດເລື່ອງເຫລົ່ານີ້ກັບທຸກຕະກຸນ, ທຸກປະຊາຊາດ, ທຸກພາສາ, ຍ້ອນເຫດນີ້ຜູ້ໃດກໍຕາມທີ່ເຊື່ອວ່າ ພຣະຄຣິດຈະສະເດັດມາ, ຜູ້ນັ້ນຈະໄດ້ຮັບ ການປົດບາບຂອງພວກເຂົາ, ແລະ ປິຕິຍິນດີດ້ວຍຄວາມຊື່ນຊົມຢ່າງຍິ່ງ, ແມ່ນແຕ່ ຄືກັບວ່າພຣະອົງໄດ້ສະເດັດມາໃນບັນດາພວກເຂົາແລ້ວ.

And the Lord God hath sent his holy prophets among all the children of men, to declare these things to every kindred, nation, and tongue, that thereby whosoever should believe that Christ should come, the same might receive remission of their sins, and rejoice with exceedingly great joy, even as though he had already come among them.

໑໔ ແຕ່ອົງພຣະຜູ້ເປັນເຈົ້າກໍຍັງເຫັນວ່າຜູ້ຄົນຂອງພຣະອົງເປັນຄົນແຂງຄໍ, ແລະ ພຣະອົງໄດ້ກຳນົດກົດໄວ້ໃຫ້ພວກເຂົາ, ແມ່ນແຕ່ ກົດຂອງໂມເຊ.

Yet the Lord God saw that his people were a stiffnecked people, and he appointed unto them a law, even the law of Moses.

໑໕ ແລະ ເຄື່ອງໝາຍ, ແລະ ການແປກປະຫລາດ, ແລະ ແບບຢ່າງ, ແລະ ເງົາຫລາຍຢ່າງທີ່ພຣະອົງໄດ້ສະແດງແກ່ພວກເຂົາກ່ຽວກັບການສະເດັດມາຂອງພຣະອົງ; ແລະ ສາດສະດາຜູ້ບໍລິສຸດຈະເວົ້າກັບພວກເຂົາກ່ຽວກັບການສະເດັດມາຂອງພຣະອົງນຳອີກ; ແຕ່ພວກເຂົາກໍເຮັດໃຈແຂງກະດ້າງຢູ່ ແລະ ບໍ່ເຂົ້າໃຈວ່າ ກົດຂອງໂມເຊບໍ່ມີຜົນອັນໃດເລີຍນອກຈາກຈະເປັນໂດຍທາງການຊົດໃຊ້ດ້ວຍໂລຫິດຂອງພຣະອົງເທົ່ານັ້ນ.

And many signs, and wonders, and types, and shadows showed he unto them, concerning his coming; and also holy prophets spake unto them concerning his coming; and yet they hardened their hearts, and understood not that the law of Moses availeth nothing except it were through the atonement of his blood.

ແລະ ເຖິງແມ່ນຖ້າຫາກເປັນໄປວ່າ ເດັກນ້ອຍໆເຮັດບາບໄດ້ ພວກເຂົາຈະລອດບໍ່ໄດ້; ແຕ່ຂ້າພະເຈົ້າກ່າວກັບພວກທ່ານວ່າ ພວກເຂົາໄດ້ ຮັບພອນແລ້ວ; ເພາະຈົ່ງເບິ່ງ, ເໝືອນດັ່ງເຊັ່ນໃນ ອາດາມໂດຍທຳມະຊາດເຂົາຕົກ, ເຖິງແມ່ນເປັນເຊັ່ນນັ້ນ ໂລຫິດ ຂອງພຣະຄຣິດກໍຊົດໃຊ້ແທນບາບຂອງພວກເຂົາ.

And even if it were possible that little children could sin they could not be saved; but I say unto you they are blessed; for behold, as in Adam, or by nature, they fall, even so the blood of Christ atoneth for their sins.

ແລະ ຍິ່ງກວ່ານັ້ນ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ຈະ ບໍ່ມີ ນາມອື່ນໃດໃຫ້ໄວ້ ຫລື ທາງອື່ນໃດ ຫລື ວິທີໃດທີ່ ຄວາມລອດ ຈະມາຫາລູກຫລານມະນຸດໄດ້ ນອກຈາກໃນ ແລະ ໂດຍພຣະ ນາມຂອງ ພຣະຄຣິດພຣະຜູ້ເປັນເຈົ້າອົງຊົງລິດອຳນາດຍິ່ງ ໃຫຍ່.

And moreover, I say unto you, that there shall be no other name given nor any other way nor means whereby salvation can come unto the children of men, only in and through the name of Christ, the Lord Omnipotent.

ເພາະຈົ່ງເບິ່ງ, ພຣະອົງພິພາກສາ ແລະ ການພິພາກສາ ຂອງພຣະອົງທ່ຽງທຳກັບທຸກຄົນ; ແລະ ເດັກແດງທາລົກທີ່ ເສຍຊີວິດນັ້ນບໍ່ໄດ້ຕາຍເລີຍ; ມະນຸດຈະກິນຄວາມອັບປະໂຫຍດ ເຂົ້າໄປໃນຈິດວິນຍານຂອງຕົນ ຖ້າຫາກພວກເຂົາບໍ່ຖ່ອມຕົວ ແລະ ກາຍເປັນຄືກັນກັບເດັກນ້ອຍໆ, ແລະ ເຊື່ອວ່າຄວາມລອດ ມີມາແລ້ວ ແລະ ມີຢູ່ ແລະ ຈະມາເຖິງໃນ ແລະ ໂດຍໂລຫິດທີ່ ຊົດໃຊ້ຂອງພຣະຄຣິດພຣະຜູ້ເປັນເຈົ້າອົງຊົງລິດອຳນາດຍິ່ງ ໃຫຍ່.

For behold he judgeth, and his judgment is just; and the infant perisheth not that dieth in his infancy; but men drink damnation to their own souls except they humble themselves and become as little children, and believe that salvation was, and is, and is to come, in and through the atoning blood of Christ, the Lord Omnipotent.

ເພາະມະນຸດທີ່ມີ ຈິດໃຈທຳມະດາເປັນສັດຕູກັບພຣະເຈົ້າ, ແລະ ເປັນມາແລ້ວຕັ້ງແຕ່ ການຕົກຂອງອາດາມ, ແລະ ຈະເປັນ ໄປຕະຫລອດການ ແລະ ຕະຫລອດໄປ, ເວັ້ນເສຍແຕ່ພວກເຂົາ ຈະ ຍອມຕໍ່ການຊັກຈູງຂອງ ພຣະວິນຍານສັກສິດ, ແລະ ປະຖິ້ມ ມະນຸດທີ່ມີຈິດໃຈທຳມະດາ ແລະ ກາຍມາເປັນ ໄພ່ພົນຂອງ ພຣະເຈົ້າໂດຍການຊົດໃຊ້ຂອງອົງພຣະຄຣິດ, ແລະ ກາຍເປັນຄື ກັນກັບ ເດັກນ້ອຍ, ບອກລອນສອນງ່າຍ, ອ່ອນໂยน, ຖ່ອມຕົວ, ອົດທົນ, ເຕັມໄປດ້ວຍຄວາມຮັກ, ເຕັມໃຈໃນທຸກສິ່ງທີ່ພຣະຜູ້ ເປັນເຈົ້າເຫັນສົມຄວນທີ່ຈະໃຫ້ເກີດກັບພວກເຂົາ, ເໝືອນດັ່ງ ເດັກນ້ອຍຍິນຍອມຕໍ່ບິດາຂອງຕົນ.

For the natural man is an enemy to God, and has been from the fall of Adam, and will be, forever and ever, unless he yields to the enticings of the Holy Spirit, and putteth off the natural man and becometh a saint through the atonement of Christ the Lord, and becometh as a child, submissive, meek, humble, patient, full of love, willing to submit to all things which the Lord seeth fit to inflict upon him, even as a child doth submit to his father.

ແລະ ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າເວົ້າກັບພວກທ່ານວ່າ ເວລາ ຈະມາເຖິງເມື່ອ ຄວາມຮູ້ເລື່ອງຂອງພຣະຜູ້ຊ່ວຍໃຫ້ລອດຈະແຜ່ ໄປທົ່ວ ທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນ ທັງປວງ.

And moreover, I say unto you, that the time shall come when the knowledge of a Savior shall spread throughout every nation, kindred, tongue, and people.

ແລະ ຈົ່ງເບິ່ງ, ເມື່ອເວລານັ້ນມາເຖິງຈະບໍ່ມີຜູ້ໃດເລີຍທີ່ ບໍ່ມີຂໍ້ ຕຳນິຕໍ່ພຣະພັກຂອງພຣະເຈົ້າ ນອກຈາກຈະເປັນດັ່ງເດັກນ້ອຍ ໆ, ພຽງແຕ່ໂດຍການກັບໃຈ ແລະ ມີສັດທາໃນພຣະນາມຂອງ ອົງພຣະຜູ້ເປັນເຈົ້າອົງຊົງລິດອຳນາດຍິ່ງໃຫຍ່.

And behold, when that time cometh, none shall be found blameless before God, except it be little children, only through repentance and faith on the name of the Lord God Omnipotent.

ແລະ ເຖິງແມ່ນໃນເວລານີ້ ເມື່ອພວກທ່ານສິດສອນຜູ້ຄົນ ຂອງພວກທ່ານເຖິງສິ່ງທີ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າໄດ້ ບັນຊາພວກທ່ານ, ຈົນຮອດເວລານັ້ນ ຈະພົບວ່າ ພວກເຂົາບໍ່ມີ ຂໍ້ຕຳນິອີກຕໍ່ໄປ ໃນສາຍພຣະເນດຂອງພຣະເຈົ້າ, ພຽງແຕ່ ຕາມ ຄຳທີ່ຂ້າພະເຈົ້າໄດ້ກ່າວກັບພວກທ່ານເທົ່ານັ້ນ.

And even at this time, when thou shalt have taught thy people the things which the Lord thy God hath commanded thee, even then are they found no more blameless in the sight of God, only according to the words which I have spoken unto thee.

๘๓ ແລະ ບັດນີ້ ຂ້າພະເຈົ້າໄດ້ກ່າວຄຳຊຶ່ງອົງພຣະຜູ້ເປັນເຈົ້າໄດ້ບັນຊາຂ້າພະເຈົ້າແລ້ວ.

And now I have spoken the words which the Lord God hath commanded me.

๘๔ ແລະ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ຄຳເຫລົ່ານັ້ນຈະຢືນເປັນປະຈັກພະຍານທີ່ແຈ່ມແจ້ງຕໍ່ຜູ້ຄົນພວກນີ້ໃນວັນພິພາກສາ; ຊຶ່ງແຕ່ລະຄົນຈະຖືກພິພາກສາຕາມຄຳເຫລົ່ານັ້ນ ຕາມວຽກງານຂອງພວກເຂົາ, ບໍ່ວ່າດີ ຫລື ຊົ່ວ.

And thus saith the Lord: They shall stand as a bright testimony against this people, at the judgment day; whereof they shall be judged, every man according to his works, whether they be good, or whether they be evil.

๘๕ ແລະ ຖ້າຫາກພວກເຂົາຊົ່ວ ພວກເຂົາຈະຖືກສົ່ງໄປຫາ ຄວາມຫລັງອັນເປັນຕາຢ້ານກ່ຽວກັບຄວາມຜິດ ແລະ ຄວາມໜ້າກຽດຊັງຂອງພວກເຂົາ ຊຶ່ງເຮັດໃຫ້ພວກເຂົາຖອຍອອກໄປ ຈາກທີ່ປະທັບຂອງພຣະຜູ້ເປັນເจ້ົ້າ ໄປຫາສະພາບແຫ່ງ ຄວາມທຸກຍາກ ແລະ ຄວາມທໍລະມານທີ່ບໍ່ມີວັນສິ້ນສຸດ ຊຶ່ງຈາກນັ້ນ ພວກເຂົາຈະກັບມາອີກບໍ່ໄດ້; ສະນັ້ນພວກເຂົາຈຶ່ງໄດ້ກິນຄວາມອັບປະໂຫຍດເຂົ້າໄປສູ່ຈິດວິນຍານຂອງພວກເຂົາແລ້ວ.

And if they be evil they are consigned to an awful view of their own guilt and abominations, which doth cause them to shrink from the presence of the Lord into a state of misery and endless torment, from whence they can no more return; therefore they have drunk damnation to their own souls.

๘๖ ສະນັ້ນ ພວກເຂົາໄດ້ດື່ມຈາກຈອກແຫ່ງພຣະພິโลດຂອງ ພຣະເจ້ົ້າແລ້ວ, ຊຶ່ງຄວາມຍຸດຕິທຳນັ້ນປະຕິເສດພວກເຂົາບໍ່ໄດ້ ດັ່ງທີ່ປະຕິເສດບໍ່ໄດ້ວ່າ ອາດາມຈະຕົກເພາະການຮັບສ່ວນ ໝາກໄມ້ທີ່ຕ້ອງຫ້າມນັ້ນ; ສະນັ້ນ, ຄວາມເມດຕາຈະມີສິດເໜືອ ພວກເຂົາອີກບໍ່ໄດ້ຕະຫລອດການ.

Therefore, they have drunk out of the cup of the wrath of God, which justice could no more deny unto them than it could deny that Adam should fall because of his partaking of the forbidden fruit; therefore, mercy could have claim on them no more forever.

๘๗ ແລະ ຄວາມທຸກທໍລະມານຂອງພວກເຂົາຈະເປັນເໝືອນດັ່ງ ທະເລໄຟ ແລະ ມາດ ຊຶ່ງແປວໄຟນັ້ນບໍ່ຮູ້ຈັກມອດ ແລະ ຄວັນ ມັນລອຍຂຶ້ນຢູ່ຕະຫລອດການ ແລະ ຕະຫລອດໄປ. ພຣະຜູ້ເປັນ ເจ້ົ້າໄດ້ບັນຊາຂ້າພະເຈົ້າດັ່ງນີ້. ອາແມນ.

And their torment is as a lake of fire and brimstone, whose flames are unquenchable, and whose smoke ascendeth up forever and ever. Thus hath the Lord commanded me. Amen.

ໂມໄຊຢາ ๔

๑ ແລະ ບັດນີ້, ເຫດການໄດ້ບັງເກີດຂຶ້ນຄື ເມື່ອກະສັດເບັນຢາມິນ
ເວົ້າຂໍ້ຄວາມຊຶ່ງເພິ່ນໄດ້ຮັບມອບໝາຍຈາກທູດຂອງພຣະຜູ້
ເປັນເຈົ້າຈົບແລ້ວ, ເພິ່ນໄດ້ກວາດສາຍຕາໄປຮອບໆເບິ່ງຝູງຊົນ,
ແລະ ຈົ່ງເບິ່ງ ພວກເຂົາລົ້ມຢູ່ກັບພື້ນດິນເພາະ ຄວາມຢ້ານກົວ
ພຣະຜູ້ເປັນເຈົ້າໄດ້ເກີດກັບພວກເຂົາແລ້ວ.

๒ ແລະ ພວກເຂົາເຫັນຕົວເອງຢູ່ໃນສະພາບແຫ່ງ ກາມມະລົມ,
ເຖິງແມ່ນມີຄຸນຄ່າ ນ້ອຍກວ່າຂີ້ຝຸ່ນຂອງແຜ່ນດິນໂລກ. ແລະ
ພວກເຂົາທັງໝົດຮ້ອງອອກມາເປັນສຽງດຽວກັນວ່າ: ໂອ້ ຂໍຊົງ
ໂປດເມດຕາ ແລະ ໂປດໃຊ້ໂລຫິດທີ່ ຊົດໃຊ້ຂອງພຣະຄຣິດ ເພື່ອ
ພວກຂ້ານ້ອຍຈະໄດ້ຮັບການໃຫ້ອະໄພຈາກບາບຂອງພວກຂ້າ
ນ້ອຍ, ແລະ ເພື່ອໃຈຂອງພວກຂ້ານ້ອຍຈະຖືກເຮັດໃຫ້ບໍລິສຸດ;
ເພາະພວກຂ້ານ້ອຍເຊື່ອໃນພຣະເຢຊູຄຣິດ, ພຣະບຸດຂອງ
ພຣະເຈົ້າ, ຜູ້ໄດ້ ສ້າງສະຫວັນ ແລະ ແຜ່ນດິນໂລກ, ແລະ ທຸກ
ຢ່າງ; ຜູ້ຈະສະເດັດລົງມາໃນທ່າມກາງລູກຫລານມະນຸດ.

๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກພວກເຂົາໄດ້ເວົ້າ
ຂໍ້ຄວາມນີ້ແລ້ວ ພຣະວິນຍານຂອງພຣະຜູ້ເປັນເຈົ້າ ກໍໄດ້ສະເດັດ
ມາເທິງພວກເຂົາ, ແລະ ພວກເຂົາກໍເຕັມໄປດ້ວຍຄວາມສຸກ
ໂດຍທີ່ໄດ້ຮັບ ການປົດບາບຂອງພວກເຂົາ, ແລະ ໂດຍຄວາມ
ສະຫງົບໃນ ຈິດສຳນຶກ, ເພາະ ສັດທາອັນຍິ່ງໃຫຍ່ທີ່ພວກເຂົາມີ
ຢູ່ໃນພຣະເຢຊູຄຣິດ ຜູ້ຈະສະເດັດມາຕາມຂໍ້ຄວາມ ຊຶ່ງກະສັດ
ເບັນຢາມິນໄດ້ກ່າວກັບພວກເຂົາ.

๔ ແລະ ກະສັດເບັນຢາມິນໄດ້ເປີດປາກອີກ ແລະ ເລີ່ມກ່າວກັບ
ພວກເຂົາ, ມີຄວາມວ່າ: ເພື່ອນຂອງຂ້າພະເຈົ້າ ແລະ ພີ່ນ້ອງ
ຂອງຂ້າພະເຈົ້າ, ຍາດຂອງຂ້າພະເຈົ້າ ແລະ ຜູ້ຄົນຂອງ
ຂ້າພະເຈົ້າ, ຂ້າພະເຈົ້າຢາກໃຫ້ພວກທ່ານຕັ້ງໃຈຟັງອີກ ເພື່ອ
ພວກທ່ານຈະໄດ້ຍິນ ແລະ ເຂົ້າໃຈຂໍ້ຄວາມທີ່ຍັງເຫລືອຢູ່ຊຶ່ງ
ຂ້າພະເຈົ້າຈະເວົ້າກັບພວກທ່ານ.

๕ ເພາະຈົ່ງເບິ່ງ ຖ້າຫາກຄວາມຮູ້ເຖິງພຣະກະລຸນາທິຄຸນຂອງ
ພຣະເຈົ້າໃນເວລານີ້ ປຸກພວກທ່ານໃຫ້ຮູ້ສຶກເຖິງຄວາມບໍ່ມີ
ຫຍັງ ແລະ ສະພາບທີ່ບໍ່ມີຄຸນຄ່າ ແລະ ຄວາມຕົກຕ່ຳຂອງພວກ
ທ່ານແລ້ວ—

Mosiah 4

And now, it came to pass that when king Benjamin had made an end of speaking the words which had been delivered unto him by the angel of the Lord, that he cast his eyes round about on the multitude, and behold they had fallen to the earth, for the fear of the Lord had come upon them.

And they had viewed themselves in their own carnal state, even less than the dust of the earth. And they all cried aloud with one voice, saying: O have mercy, and apply the atoning blood of Christ that we may receive forgiveness of our sins, and our hearts may be purified; for we believe in Jesus Christ, the Son of God, who created heaven and earth, and all things; who shall come down among the children of men.

And it came to pass that after they had spoken these words the Spirit of the Lord came upon them, and they were filled with joy, having received a remission of their sins, and having peace of conscience, because of the exceeding faith which they had in Jesus Christ who should come, according to the words which king Benjamin had spoken unto them.

And king Benjamin again opened his mouth and began to speak unto them, saying: My friends and my brethren, my kindred and my people, I would again call your attention, that ye may hear and understand the remainder of my words which I shall speak unto you.

For behold, if the knowledge of the goodness of God at this time has awakened you to a sense of your nothingness, and your worthless and fallen state—

ຂ້າພະເຈົ້າເວົ້າກັບພວກທ່ານອີກວ່າ ຖ້າຫາກພວກທ່ານມາ
ຮູ້ເລື່ອງພຣະກະລຸນາທິຄຸນຂອງພຣະເຈົ້າ ແລະ ອຳນາດອັນຫາ
ທີ່ປຽບບໍ່ໄດ້ຂອງພຣະອົງ, ແລະ ຄວາມສະຫລຽວສະຫລາດ
ຂອງພຣະອົງ, ແລະ ຄວາມອົດທົນຂອງພຣະອົງ, ແລະ ຄວາມ
ອົດກັ້ນຂອງພຣະອົງທີ່ມີຕໍ່ລູກຫລານມະນຸດ; ແລະ ການຊົດໃຊ້
ນຳອີກ ຊຶ່ງຕຽມໄວ້ນັບຕັ້ງແຕ່ ການວາງຮາກຖານຂອງໂລກ,
ເພື່ອໂດຍການນັ້ນຄວາມລອດຈະໄດ້ມາເຖິງຄົນທີ່ ວາງໃຈຂອງ
ຕົນໃນພຣະຜູ້ເປັນເຈົ້າ ແລະ ພາກພຽນໃນການຮັກສາ
ພຣະບັນຍັດຂອງພຣະອົງ, ແລະ ດຳເນີນຕໍ່ໄປໃນສັດທາເຖິງ
ແມ່ນຈົນເຖິງທີ່ສຸດຂອງຊີວິດຂອງພວກເຂົາ, ຂ້າພະເຈົ້າໝາຍ
ເຖິງຊີວິດຂອງຮ່າງກາຍທີ່ເປັນມະຕະນີ້—

I say unto you, if ye have come to a knowledge of the goodness of God, and his matchless power, and his wisdom, and his patience, and his long-suffering towards the children of men; and also, the atonement which has been prepared from the foundation of the world, that thereby salvation might come to him that should put his trust in the Lord, and should be diligent in keeping his commandments, and continue in the faith even unto the end of his life, I mean the life of the mortal body—

ຂ້າພະເຈົ້າກ່າວວ່າ ນີ້ຄືຄົນທີ່ໄດ້ຮັບຄວາມລອດ ໂດຍຜ່ານ
ທາງການຊົດໃຊ້ ຊຶ່ງມີຕຽມໄວ້ນັບຕັ້ງແຕ່ການວາງຮາກຖານ
ຂອງໂລກເພື່ອມະນຸດຊາດທັງປວງ, ຊຶ່ງເຄີຍເປັນຢູ່ມາຕັ້ງແຕ່
ການຕົກຂອງອາດາມ, ຫລື ທີ່ເປັນຢູ່, ຫລື ທີ່ຈະເປັນຢູ່, ຕໍ່ໄປ
ເຖິງແມ່ນຈົນເຖິງຄາວສິ້ນສຸດໂລກ.

I say, that this is the man who receiveth salvation, through the atonement which was prepared from the foundation of the world for all mankind, which ever were since the fall of Adam, or who are, or who ever shall be, even unto the end of the world.

ແລະ ນີ້ຄືເສັ້ນທາງຊຶ່ງຄວາມລອດຈະມາເຖິງ. ແລະ ບໍ່ມີ
ຄວາມລອດອື່ນຊຶ່ງມະນຸດຈະລອດໄດ້ນອກຈາກຄວາມລອດນີ້ຊຶ່ງ
ຂ້າພະເຈົ້າໄດ້ບອກພວກທ່ານໄວ້; ທັງບໍ່ມີເງື່ອນໄຂໃດຊຶ່ງຕາມ
ນັ້ນມະນຸດຈະລອດໄດ້ເວັ້ນເສຍແຕ່ເງື່ອນໄຂຊຶ່ງຂ້າພະເຈົ້າໄດ້
ບອກພວກທ່ານແລ້ວ.

And this is the means whereby salvation cometh. And there is none other salvation save this which hath been spoken of; neither are there any conditions whereby man can be saved except the conditions which I have told you.

ຈົ່ງເຊື່ອໃນພຣະເຈົ້າ; ຈົ່ງເຊື່ອວ່າພຣະອົງໄດ້ເປັນຢູ່, ແລະ ວ່າ
ພຣະອົງໄດ້ສ້າງທຸກສິ່ງ, ທັງໃນສະຫວັນ ແລະ ໃນແຜ່ນດິນ
ໂລກ; ຈົ່ງເຊື່ອວ່າພຣະອົງມີ ຄວາມສະຫລຽວສະຫລາດ ແລະ
ອຳນາດທັງໝົດທັງໃນສະຫວັນ ແລະ ແຜ່ນດິນໂລກ; ຈົ່ງເຊື່ອ
ວ່າມະນຸດບໍ່ ເຂົ້າໃຈທຸກໆຢ່າງຊຶ່ງພຣະຜູ້ເປັນເຈົ້າເຂົ້າໃຈໄດ້.

Believe in God; believe that he is, and that he created all things, both in heaven and in earth; believe that he has all wisdom, and all power, both in heaven and in earth; believe that man doth not comprehend all the things which the Lord can comprehend.

ແລະ ອີກຢ່າງໜຶ່ງ, ຈົ່ງເຊື່ອວ່າພວກທ່ານຕ້ອງ ກັບໃຈຈາກ
ບາບຂອງພວກທ່ານ, ແລະ ປະຖິ້ມມັນ ແລະ ຖ່ອມຕົວຕໍ່
ພຣະພັກຂອງພຣະເຈົ້າ; ແລະ ທູນຂໍດ້ວຍໃຈຈິງໃຫ້ພຣະອົງ
ອະໄພໃຫ້ພວກທ່ານ; ແລະ ບັດນີ້, ຖ້າຫາກພວກທ່ານ ເຊື່ອສິ່ງ
ທັງໝົດນີ້ ໃຫ້ເບິ່ງວ່າພວກທ່ານ ເຮັດຕາມນັ້ນ.

And again, believe that ye must repent of your sins and forsake them, and humble yourselves before God; and ask in sincerity of heart that he would forgive you; and now, if you believe all these things see that ye do them.

ແລະ ອີກຢ່າງໜຶ່ງ ຂ້າພະເຈົ້າເວົ້າກັບພວກທ່ານດັ່ງທີ່ ຂ້າພະເຈົ້າໄດ້ເວົ້າມາກ່ອນແລ້ວວ່າ ເມື່ອພວກທ່ານມາເຖິງ ຄວາມຮູ້ເລື່ອງລັດສະໝີພາບຂອງພຣະເຈົ້າ, ຫລື ຖ້າຫາກ ພວກທ່ານຮູ້ເຖິງພຣະກະລຸນາທິຄຸນຂອງພຣະອົງ, ແລະ ຊົມ ລົດຊາດຄວາມຮັກຂອງພຣະອົງ, ແລະ ໄດ້ຮັບ ການປົດບາບ ຂອງພວກທ່ານ ຊຶ່ງເຮັດໃຫ້ເກີດມີຄວາມຊື່ນຊົມຢ່າງລົ້ນເຫລືອ ໃນຈິດວິນຍານຂອງພວກທ່ານແລ້ວ, ເຖິງເຊັ່ນນັ້ນຂ້າພະເຈົ້າຍັງ ຢາກໃຫ້ພວກທ່ານຈື່ຈຳ ແລະ ເກັບໄວ້ໃນຄວາມຊົງຈຳສະເໝີ ເຖິງຄວາມຍິ່ງໃຫຍ່ຂອງພຣະເຈົ້າກັບ ຄວາມບໍ່ມີຄ່າຫຍັງຂອງ ພວກທ່ານເອງ, ແລະ ພຣະກະລຸນາທິຄຸນ ແລະ ຄວາມອົດກັ້ນ ຂອງພຣະອົງທີ່ມີຕໍ່ພວກທ່ານ ເປັນຜູ້ບໍ່ມີຄ່າຄວນ, ແລະ ຈົ່ງ ຖ່ອມຕົວຂອງພວກທ່ານເຖິງແມ່ນເຖິງສ່ວນເລິກແຫ່ງ ຄວາມ ຖ່ອມຕົວໂດຍ ເອີ້ນຫາພຣະນາມຂອງພຣະຜູ້ເປັນເຈົ້າທຸກມື້, ແລະ ຢືນຢູ່ຢ່າງໝັ້ນຄົງຢູ່ໃນສັດທາຂອງສິ່ງທີ່ຈະມາເຖິງ, ຊຶ່ງ ໄດ້ເວົ້າໄວ້ຈາກປາກຂອງທູດເອງ.

And again I say unto you as I have said before, that as ye have come to the knowledge of the glory of God, or if ye have known of his goodness and have tasted of his love, and have received a remission of your sins, which causeth such exceedingly great joy in your souls, even so I would that ye should remember, and always retain in remembrance, the greatness of God, and your own nothingness, and his goodness and long-suffering towards you, unworthy creatures, and humble yourselves even in the depths of humility, calling on the name of the Lord daily, and standing steadfastly in the faith of that which is to come, which was spoken by the mouth of the angel.

ແລະ ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ຖ້າຫາກ ພວກທ່ານເຮັດສິ່ງນີ້ ພວກທ່ານຈະປິຕິຍິນດີຢູ່ສະເໝີ ແລະ ຈະ ເຕັມໄປດ້ວຍ ຄວາມຮັກຂອງພຣະເຈົ້າ, ແລະ ການປົດບາບຂອງ ພວກທ່ານຈະ ມີຢູ່ສະເໝີ; ແລະ ພວກທ່ານຈະເຕີບໂຕໃນ ຄວາມຈະເລີນຮຸ່ງເຮືອງ ແລະ ໃນລັດສະໝີພາບຂອງພຣະອົງຜູ້ ສ້າງພວກທ່ານ, ຫລື ໃນຄວາມຮູ້ເຖິງສິ່ງທີ່ທ່ຽງທຳ ແລະ ຈິງ.

And behold, I say unto you that if ye do this ye shall always rejoice, and be filled with the love of God, and always retain a remission of your sins; and ye shall grow in the knowledge of the glory of him that created you, or in the knowledge of that which is just and true.

ແລະ ພວກທ່ານຈະບໍ່ມີຈິດໃຈທີ່ຈະເຮັດສິ່ງອັນຕະລາຍໃຫ້ຊຶ່ງ ກັນແລະກັນ, ແຕ່ຈະຢູ່ນຳກັນ ຢ່າງສັນຕິ, ແລະ ມອບໃຫ້ທຸກຄົນ ຕາມທີ່ເຂົາຄວນຈະໄດ້ຮັບ.

And ye will not have a mind to injure one another, but to live peaceably, and to render to every man according to that which is his due.

ແລະ ພວກທ່ານຈະບໍ່ປ່ອຍໃຫ້ ລູກຫລານຂອງພວກທ່ານ ຫິວໂຫຍ ຫລື ເປືອຍເປົ່າ; ທັງພວກທ່ານຈະບໍ່ປ່ອຍໃຫ້ພວກ ເຂົາລ່ວງລະເມີດກົດຂອງພຣະເຈົ້າ, ແລະ ຕໍ່ສູ້ ແລະ ຜິດຖຽງ ກັນ, ແລະ ຮັບໃຊ້ມານຜູ້ເປັນນາຍຂອງບາບ, ຫລື ຜູ້ເປັນ ວິນຍານຊົ່ວ ຊຶ່ງບັນພະບຸລຸດຂອງພວກເຮົາເວົ້າເຖິງ ຊຶ່ງມັນເປັນ ສັດຕູກັບຄວາມຊອບທຳທັງປວງ.

And ye will not suffer your children that they go hungry, or naked; neither will ye suffer that they transgress the laws of God, and fight and quarrel one with another, and serve the devil, who is the master of sin, or who is the evil spirit which hath been spoken of by our fathers, he being an enemy to all righteousness.

ແຕ່ພວກທ່ານຈະ ສິດສອນໃຫ້ພວກເຂົາ ເດີນໃນເສັ້ນທາງ ແຫ່ງຄວາມຈິງ ແລະ ຄວາມມີສະຕິສຳປະສັນຍະ; ພວກທ່ານຈະ ສິດສອນໃຫ້ພວກເຂົາ ຮັກກັນ ແລະ ຮັບໃຊ້ຊຶ່ງກັນແລະກັນ.

But ye will teach them to walk in the ways of truth and soberness; ye will teach them to love one another, and to serve one another.

ແລະ ພ້ອມນີ້ຕົວພວກທ່ານເອງຈະ ຊ່ວຍເຫລືອຄົນທີ່ ຕ້ອງການຄວາມຊ່ວຍເຫລືອ; ພວກທ່ານຈະໃຫ້ເຂົ້າຂອງ ຂອງ ພວກທ່ານແກ່ຄົນທີ່ຂັດສົນ; ແລະ ພວກທ່ານຈະບໍ່ປ່ອຍໃຫ້ ຄົນ ຂໍທານຂໍທ່ານໂດຍຜິດຫວັງ, ແລະ ໄລ່ເຂົາອອກໄປໃຫ້ຕາຍ.

And also, ye yourselves will succor those that stand in need of your succor; ye will administer of your substance unto him that standeth in need; and ye will not suffer that the beggar putteth up his petition to you in vain, and turn him out to perish.

ບາງທີພວກທ່ານອາດຈະ ເວົ້າວ່າ: ຄົນນີ້ນຳຄວາມທຸກຍາກ ມາສູ່ຕົນເອງ; ສະນັ້ນ, ເຮົາຈະຢັບຢັ้ງມືຂອງເຮົາໄວ້, ແລະ ຈະບໍ່ ໃຫ້ເຂົ້າຂອງ ຫລື ບໍ່ໃຫ້ອາຫານຂອງເຮົາແກ່ເຂົາເພື່ອວ່າເຂົາຈະ ບໍ່ໄດ້ທຸກທໍລະມານ ເພາະໂທດຂອງເຂົານັ້ນທ່ຽງທຳແລ້ວ—

Perhaps thou shalt say: The man has brought upon himself his misery; therefore I will stay my hand, and will not give unto him of my food, nor impart unto him of my substance that he may not suffer, for his punishments are just—

ແຕ່ຂ້າພະເຈົ້າເວົ້າກັບພວກທ່ານວ່າ, ໂອ້ ມະນຸດ, ຜູ້ໃດ ກໍຕາມທີ່ກະທຳເຊັ່ນນີ້ ຜູ້ນັ້ນຍ່ອມມີເຫດຜົນສຳຄັນທີ່ຈະກັບໃຈ; ແລະ ຖ້າຫາກເຂົາບໍ່ກັບໃຈໃນສິ່ງທີ່ເຂົາກະທຳໄປ ເຂົາຍ່ອມຕາຍ ຕະຫລອດການ, ແລະ ບໍ່ໄດ້ສິ່ງໃດເລີຍໃນອານາຈັກຂອງ ພຣະເຈົ້າ.

But I say unto you, O man, whosoever doeth this the same hath great cause to repent; and except he repenteth of that which he hath done he perisheth forever, and hath no interest in the kingdom of God.

ເພາະຈົ່ງເບິ່ງ, ພວກເຮົາບໍ່ໄດ້ເປັນຄົນຂໍທານທັງໝົດບໍ? ພວກເຮົາບໍ່ໄດ້ອາໄສພຣະເຈົ້າອົງດຽວກັນ, ເພື່ອເຂົ້າຂອງ ທັງໝົດ ຊຶ່ງພວກເຮົາມີຢູ່ເພື່ອອາຫານ ແລະ ເຄື່ອງນຸ່ງຫົ່ມ, ແລະ ເພື່ອຄຳ, ແລະ ເງິນ, ແລະ ເພື່ອຂອງມີຄ່າທັງໝົດທີ່ພວກ ເຮົາມີຢູ່ທຸກຊະນິດບໍ?

For behold, are we not all beggars? Do we not all depend upon the same Being, even God, for all the substance which we have, for both food and raiment, and for gold, and for silver, and for all the riches which we have of every kind?

ແລະ ຈົ່ງເບິ່ງ, ເຖິງແມ່ນໃນເວລານີ້, ພວກທ່ານກໍເອີ້ນຫາ ພຣະນາມຂອງພຣະອົງຢູ່, ເພື່ອທູນຂໍການປົດບາບຂອງພວກ ທ່ານ. ແລະ ພຣະອົງຈະປ່ອຍໃຫ້ພວກທ່ານຂໍໂດຍຜິດຫວັງບໍ? ບໍ່ເລີຍ; ພຣະອົງໄດ້ເທພຣະວິນຍານຂອງພຣະອົງລົງມາເທິງ ພວກທ່ານ, ແລະ ເຮັດໃຫ້ໃຈຂອງພວກທ່ານເຕັມໄປດ້ວຍ ຄວາມສຸກ, ແລະ ເຮັດໃຫ້ປາກຂອງພວກທ່ານຢຸດຈົນພວກ ທ່ານຫາຄຳເວົ້າມາເວົ້າບໍ່ໄດ້, ເພາະຄວາມຊື່ນຊົມຂອງພວກ ທ່ານນັ້ນລົ້ນເຫລືອ.

And behold, even at this time, ye have been calling on his name, and begging for a remission of your sins. And has he suffered that ye have begged in vain? Nay; he has poured out his Spirit upon you, and has caused that your hearts should be filled with joy, and has caused that your mouths should be stopped that ye could not find utterance, so exceedingly great was your joy.

ແລະ ບັດນີ້, ຖ້າຫາກພຣະເຈົ້າຜູ້ໄດ້ສ້າງພວກທ່ານມາ, ຜູ້ທີ່ ພວກທ່ານອາໄສເພື່ອຊີວິດ ແລະ ເພື່ອທຸກສິ່ງທີ່ພວກທ່ານເຄີຍ ມີ ແລະ ມີຢູ່ນີ້, ໄດ້ປະທານສິ່ງໃດກໍຕາມທີ່ພວກທ່ານຂໍດ້ວຍ ສັດທາ, ໂດຍເຊື່ອວ່າພວກທ່ານຈະໄດ້ຮັບ, ຊຶ່ງເປັນສິ່ງທີ່ ຖືກຕ້ອງໃຫ້ແກ່ພວກທ່ານ, ໂອ້ ແລ້ວພວກທ່ານຄວນຈະ ໃຫ້ ເຂົ້າຂອງທີ່ພວກທ່ານມີໃຫ້ກັນພຽງໃດ.

And now, if God, who has created you, on whom you are dependent for your lives and for all that ye have and are, doth grant unto you whatsoever ye ask that is right, in faith, believing that ye shall receive, O then, how ye ought to impart of the substance that ye have one to another.

ແລະ ຖ້າຫາກພວກທ່ານ ຕັດສິນຄົນທີ່ຂໍສິ່ງຂອງຈາກພວກ ທ່ານເພື່ອເຂົາຈະບໍ່ຕາຍ, ແລະ ກ່າວໂທດເຂົາແລ້ວ, ການ ກ່າວໂທດພວກທ່ານຈະທ່ຽງທຳຫລາຍກວ່ານັ້ນພຽງໃດ ເພາະ ບໍ່ແບ່ງປັນເຂົ້າຂອງ ຂອງພວກທ່ານ, ຊຶ່ງບໍ່ແມ່ນຂອງພວກ ທ່ານ ແຕ່ເປັນຂອງພຣະເຈົ້າ, ຜູ້ເປັນເຈົ້າຂອງຊີວິດຂອງພວກ ທ່ານນັ້ນອີກ; ແລະ ປານນັ້ນ ພວກທ່ານຍັງບໍ່ຂໍ, ຫລື ກັບໃຈ ຈາກສິ່ງທີ່ພວກທ່ານກະທຳໄປ.

And if ye judge the man who putteth up his petition to you for your substance that he perish not, and condemn him, how much more just will be your condemnation for withholding your substance, which doth not belong to you but to God, to whom also your life belongeth; and yet ye put up no petition, nor repent of the thing which thou hast done.

ຂ້າພະເຈົ້າເວົ້າກັບພວກທ່ານວ່າ, ວິບັດແກ່ຄົນນັ້ນ, ເພາະ ເຂົ້າຂອງ ຂອງເຂົາຈະຕາຍພ້ອມກັບເຂົາ; ແລະ ບັດນີ້, ຂ້າພະເຈົ້າກ່າວເລື່ອງເຫລົ່ານີ້ກັບຄົນທີ່ ຮັ່ງມີໃນສິ່ງຂອງຕ່າງໆ ຢູ່ໃນໂລກນີ້.

I say unto you, wo be unto that man, for his substance shall perish with him; and now, I say these things unto those who are rich as pertaining to the things of this world.

๘๔ ແລະ ອີກຢ່າງໜຶ່ງ, ຂ້າພະເຈົ້າກ່າວກັບຄົນຍາກຈົນວ່າ, ພວກທ່ານຜູ້ບໍ່ມີແຕ່ຍັງມີພຽງພໍທີ່ພວກທ່ານຈະຢູ່ໄປແຕ່ລະມື້; ຂ້າພະເຈົ້າໝາຍເຖິງທ່ານທັງຫລາຍທີ່ປະຕິເສດຄົນຂໍທານ ຍ້ອນຄວາມບໍ່ມີຂອງພວກທ່ານ; ຂ້າພະເຈົ້າຢາກໃຫ້ພວກທ່ານ ເວົ້າຢູ່ໃນໃຈວ່າ: ເຮົາບໍ່ໃຫ້ຍ້ອນວ່າເຮົາບໍ່ມີ, ແຕ່ຖ້າຫາກເຮົາມີ ເຮົາຈະ ໃຫ້.

And again, I say unto the poor, ye who have not and yet have sufficient, that ye remain from day to day; I mean all you who deny the beggar, because ye have not; I would that ye say in your hearts that: I give not because I have not, but if I had I would give.

๘๕ ແລະ ບັດນີ້ຖ້າຫາກພວກທ່ານເວົ້າຢູ່ໃນໃຈແບບນີ້ ພວກທ່ານກໍຢູ່ໂດຍບໍ່ມີຄວາມຜິດ, ຖ້າບໍ່ດັ່ງນັ້ນ ພວກທ່ານຈະຖືກກ່າວໂທດ; ແລະ ການກ່າວໂທດຂອງພວກທ່ານນັ້ນທ່ຽງທຳ ເພາະພວກທ່ານໂລບມາກນຳສິ່ງທີ່ພວກທ່ານບໍ່ໄດ້ຮັບ.

And now, if ye say this in your hearts ye remain guiltless, otherwise ye are condemned; and your condemnation is just for ye covet that which ye have not received.

๘๖ ແລະ ບັດນີ້ເພາະເຫັນແກ່ສິ່ງເຫລົ່ານີ້ ຊຶ່ງຂ້າພະເຈົ້າໄດ້ກ່າວ ກັບພວກທ່ານແລ້ວ—ນັ້ນຄື, ເພື່ອໃຫ້ມີການປົດບາບຂອງ ພວກທ່ານໄປແຕ່ລະວັນ ເພື່ອພວກທ່ານຈະ ເດີນໄປໂດຍບໍ່ມີ ຄວາມຜິດຕໍ່ພຣະພັກຂອງພຣະເຈົ້າ—ຂ້າພະເຈົ້າຢາກໃຫ້ພວກ ທ່ານ ໃຫ້ເຂົ້າຂອງ ຂອງພວກທ່ານໃຫ້ແກ່ ຄົນຍາກຈົນທຸກຄົນ ຕາມທີ່ມີເປັນຕົ້ນວ່າ ລ້ຽງອາຫານຄົນຫິວໂຫຍ, ໃຫ້ເສື້ອຜ້າແກ່ ຄົນເປືອຍເປົ່າ, ຢ້ຽມຢາມຄົນເຈັບປ່ວຍ ແລະໃຫ້ຄວາມ ຊ່ວຍເຫລືອ, ເພື່ອບັນເທົາຄົນເຫລົ່ານັ້ນທາງວິນຍານ ແລະ ທາງ ຮ່າງກາຍ, ຕາມຄວາມຕ້ອງການຂອງພວກເຂົາ.

And now, for the sake of these things which I have spoken unto you—that is, for the sake of retaining a remission of your sins from day to day, that ye may walk guiltless before God—I would that ye should impart of your substance to the poor, every man according to that which he hath, such as feeding the hungry, clothing the naked, visiting the sick and administering to their relief, both spiritually and temporally, according to their wants.

๘๗ ແລະ ໃຫ້ເບິ່ງວ່າເຮັດສິ່ງທັງໝົດນີ້ດ້ວຍປັນຍາ ແລະ ເປັນ ລະບຽບ; ເພາະບໍ່ຈຳເປັນທີ່ຄົນຈະແລ່ນ ໄວກວ່າກຳລັງຂອງຕົນ. ແລະ ອີກຢ່າງໜຶ່ງ, ສົມຄວນທີ່ເຂົາຈະພາກພຽນເພື່ອໂດຍການ ນັ້ນເຂົາຈະໄດ້ຮັບລາງວັນ; ສະນັ້ນ, ທຸກຢ່າງຕ້ອງເປັນໄປຕາມ ລະບຽບ.

And see that all these things are done in wisdom and order; for it is not requisite that a man should run faster than he has strength. And again, it is expedient that he should be diligent, that thereby he might win the prize; therefore, all things must be done in order.

๘๘ ແລະ ຂ້າພະເຈົ້າຢາກໃຫ້ພວກທ່ານຈື່ຈຳໄວ້ວ່າ ຜູ້ໃດກໍຕາມ ໃນບັນດາພວກທ່ານທີ່ຂໍຢືມຈາກເພື່ອນບ້ານຂອງຕົນ ກໍຄວນ ສົ່ງຄືນຂອງທີ່ຕົນຢືມມາຕາມທີ່ຕົກລົງກັນໄວ້ ບໍ່ດັ່ງນັ້ນ ພວກ ທ່ານຈະກະທຳບາບ; ແລະ ພວກທ່ານອາດຈະເຮັດໃຫ້ເພື່ອນ ບ້ານຂອງພວກທ່ານກະທຳບາບຄືກັນ.

And I would that ye should remember, that whosoever among you borroweth of his neighbor should return the thing that he borroweth, according as he doth agree, or else thou shalt commit sin; and perhaps thou shalt cause thy neighbor to commit sin also.

๘๙ ແລະ ສຸດທ້າຍນີ້, ຂ້າພະເຈົ້າບອກພວກທ່ານບໍ່ໄດ້ທຸກເລື່ອງ ໂດຍການທີ່ພວກທ່ານຈະກະທຳບາບ; ເພາະມີທາງ ແລະ ວິທີ ຕ່າງໆຊຶ່ງມີຫລາຍຈົນຂ້າພະເຈົ້ານັບບໍ່ໄດ້.

And finally, I cannot tell you all the things whereby ye may commit sin; for there are divers ways and means, even so many that I cannot number them.

๙๐ ແຕ່ຂ້າພະເຈົ້າບອກພວກທ່ານໄດ້ເທົ່ານີ້ຄື ຖ້າຫາກພວກ ທ່ານບໍ່ ລະວັງຕົວ ແລະ ຄວາມນຶກຄິດຂອງພວກທ່ານ, ແລະ ຄຳ ເວົ້າຂອງພວກທ່ານ, ແລະ ການກະທຳຂອງພວກທ່ານ, ແລະ ບໍ່ຍຶດຖືພຣະບັນຍັດຂອງພຣະເຈົ້າ, ແລະ ບໍ່ດຳເນີນໄປດ້ວຍ ສັດທາທີ່ພວກທ່ານໄດ້ຍິນກ່ຽວກັບການສະເດັດມາຂອງພຣະ ຜູ້ເປັນເຈົ້າຂອງພວກເຮົາ, ເຖິງແມ່ນຈົນເຖິງທີ່ສຸດແຫ່ງຊີວິດ ຂອງພວກທ່ານແລ້ວ, ພວກທ່ານຈະຕ້ອງຕາຍ. ແລະ ບັດນີ້, ໂອ້ ມະນຸດ, ຈົ່ງຈື່ຈຳຄຳເຫລົ່ານີ້ໄວ້ ແລະ ຢ່າຕາຍເລີຍ.

But this much I can tell you, that if ye do not watch yourselves, and your thoughts, and your words, and your deeds, and observe the commandments of God, and continue in the faith of what ye have heard concerning the coming of our Lord, even unto the end of your lives, ye must perish. And now, O man, remember, and perish not.

ໂມໄຊຢາ ๕

๑ ແລະ ບັດນີ້, ເຫດການໄດ້ບັງເກີດຂຶ້ນຄື ເມື່ອກະສັດເບັນຢາມິນ ໄດ້ກ່າວກັບຜູ້ຄົນຂອງເພີ່ນແລ້ວ, ເພີ່ນໄດ້ສອບຖາມໃນບັນດາ ຜູ້ຄົນ ໂດຍປາດຖະໜາຢາກຮູ້ວ່າ ພວກເຂົາເຊື່ອຄຳເວົ້າທີ່ເພີ່ນ ກ່າວໄປຫລືບໍ່.

๒ ແລະ ພວກເຂົາທຸກຄົນຮ້ອງອອກມາເປັນສຽງດຽວກັນ, ໂດຍ ກ່າວว່າ: ແທ້ຈິງແລ້ວ, ພວກເຮົາເຊື່ອຄຳເວົ້າທັງໝົດທີ່ທ່ານເວົ້າ ກັບພວກເຮົາ, ແລະ ພວກເຮົາຮູ້ເຖິງຄວາມແນ່ນອນ ແລະ ຄວາມຈິງຂອງມັນທັງໝົດ, ເພາະພຣະວິນຍານຂອງພຣະຜູ້ ເປັນເຈົ້າອົງຊົງລິດອຳນາດຍິ່ງໃຫຍ່ ໄດ້ກະທຳໃຫ້ມີ ການ ປ່ຽນແປງອັນໃຫຍ່ຫລວງໃນພວກເຮົາ, ຫລື ໃນໃຈຂອງພວກ ເຮົາ, ຈົນວ່າພວກເຮົາບໍ່ມີໃຈທີ່ຈະກະທຳ ຄວາມຊົ່ວອີກຕໍ່ໄປ, ແຕ່ ປາດຖະໜາຈະເຮັດແຕ່ຄວາມດີໂດຍຕະຫລອດ.

๓ ແລະ ພວກເຮົາຄືກັນ, ຜ່ານພຣະກະລຸນາທິຄຸນຂອງພຣະເຈົ້າ ແລະ ການສະແດງໃຫ້ປະຈັກຂອງພຣະວິນຍານຂອງພຣະອົງ, ພວກເຮົາຈຶ່ງສາມາດເຫັນກວ້າງໄກກ່ຽວກັບສິ່ງທີ່ຈະມາເຖິງ; ແລະ ຖ້າຫາກສົມຄວນພວກເຮົາຈະສາມາດທຳນາຍເຖິງທຸກ ຢ່າງໄດ້.

But I had sent my spies out round about the land of Shemlon, that I might discover their preparations, that I might guard against them, that they might not come upon my people and destroy them.

And it came to pass that they came up upon the north of the land of Shilom, with their numerous hosts, men armed with bows, and with arrows, and with swords, and with cimeters, and with stones, and with slings; and they had their heads shaved that they were naked; and they were girded with a leathern girdle about their loins.

ຈ ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້າໄດ້ເຊື່ອງພວກ ຜູ້ຍິງກັບເດັກນ້ອຍຂອງຜູ້ຄົນຂອງຂ້າພະເຈົ້າໄວ້ໃນຖິ່ນ ແຫ້ງແລ້ງກັນດານ; ແລະ ຂ້າພະເຈົ້າໄດ້ມອບອາວຸດໃຫ້ພວກ ຜູ້ຊາຍແກ່ ແລະ ຊາຍສະກັນ, ແລະ ທັງໝົດທີ່ສາມາດໃຊ້ອາວຸດ ໄດ້ໃຫ້ມາເຕົ້າໂຮມກັນເພື່ອໄປຕໍ່ສູ້ກັບຊາວເລມັນ; ແລະ ຂ້າພະເຈົ້າໃຫ້ຊັ້ນແກ່ເຂົາ, ແຕ່ລະຄົນຕາມອາຍຸຂອງໃຜລາວ.

And it came to pass that I caused that the women and children of my people should be hid in the wilderness; and I also caused that all my old men that could bear arms, and also all my young men that were able to bear arms, should gather themselves together to go to battle against the Lamanites; and I did place them in their ranks, every man according to his age.

ຊ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ຂຶ້ນໄປຕໍ່ສູ້ກັບ ຊາວເລມັນ; ແລະ ຂ້າພະເຈົ້າເຖິງວ່າຈະມີອາຍຸຫລາຍແລ້ວ, ແຕ່ ກໍຍັງໄດ້ຂຶ້ນໄປຕໍ່ສູ້ກັບຊາວເລມັນ. ແລະ ເຫດການໄດ້ບັງເກີດ ຂຶ້ນຄື ພວກເຮົາໄດ້ຂຶ້ນໄປຕໍ່ສູ້ດ້ວຍ ພະລັງຂອງພຣະຜູ້ເປັນເຈົ້າ.

And it came to pass that we did go up to battle against the Lamanites; and I, even I, in my old age, did go up to battle against the Lamanites. And it came to pass that we did go up in the strength of the Lord to battle.

ຍ ບັດນີ້, ຊາວເລມັນບໍ່ຮູ້ຈັກຫຍັງກ່ຽວກັບພຣະຜູ້ເປັນເຈົ້າເລີຍ, ຫລື ບໍ່ຮູ້ຈັກຫຍັງກ່ຽວກັບພະລັງຂອງພຣະຜູ້ເປັນເຈົ້າເລີຍ, ສະນັ້ນ ພວກເຂົາຈຶ່ງອາໄສແຕ່ກຳລັງຂອງຕົນເອງ. ເຖິງຢ່າງໃດ ກໍຕາມພວກເຂົາກໍແຂງແຮງຕາມກຳລັງຂອງມະນຸດ.

Now, the Lamanites knew nothing concerning the Lord, nor the strength of the Lord, therefore they depended upon their own strength. Yet they were a strong people, as to the strength of men.

ຍດ ພວກເຂົາເປັນຄົນ ປ່າເຖື່ອນ, ໂຫດຮ້າຍ ແລະ ກະຫາຍ ເລືອດ, ເຊື່ອຖືໃນ ຮີດຄອງປະເພນີຂອງບັນພະບຸລຸດຂອງພວກ ເຂົາຄືແນວນີ້—ພວກເຂົາຖືກໄລ່ອອກຈາກແຜ່ນດິນເຢຣູຊາເລັມ ເພາະຄວາມຊົ່ວຮ້າຍຂອງບັນພະບຸລຸດຂອງພວກເຂົາ, ແລະ ຖືກ ພີ່ນ້ອງຂອງພວກເຂົາໃສ່ຮ້າຍປ້າຍສີໃນຖິ່ນແຫ້ງແລ້ງກັນດານ, ແລະ ຖືກໃສ່ຮ້າຍປ້າຍສີເວລາທີ່ຂ້າມນ້ຳທະເລນຳອີກ;

And again, that they were wronged while in the land of their first inheritance, after they had crossed the sea, and all this because that Nephi was more faithful in keeping the commandments of the Lord—therefore he was favored of the Lord, for the Lord heard his prayers and answered them, and he took the lead of their journey in the wilderness.

ຍດ ແລະ ອີກເທື່ອໜຶ່ງ, ວ່າພວກເຂົາຖືກໃສ່ຮ້າຍປ້າຍສີເວລາທີ່ ຢູ່ໃນແຜ່ນດິນຊຶ່ງເປັນມູນມໍລະດົກແຫ່ງ ທຳອິດຂອງພວກເຂົາ, ຫລັງຈາກຂ້າມນ້ຳທະເລມາແລ້ວ, ແລະ ທັງໝົດນີ້ເປັນເພາະນີ ໄຟເປັນຄົນຊື່ສັດກວ່າໃນການຮັກສາພຣະບັນຍັດຂອງພຣະຜູ້ ເປັນເຈົ້າ—ສະນັ້ນ ເພິ່ນຈຶ່ງເປັນຄົນທີ່ພຣະຜູ້ເປັນເຈົ້າ ໂປດປານ ແລະ ພຣະຜູ້ເປັນເຈົ້າໄດ້ຍິນຄຳອະທິຖານຂອງເພິ່ນ ແລະ ຕອບ ເພິ່ນ, ແລະ ເພິ່ນຈຶ່ງໄດ້ນຳພາການເດີນທາງຂອງພວກເຂົາ ໄປ ໃນຖິ່ນແຫ້ງແລ້ງກັນດານ.

ຍຄ ແລະ ພວກອ້າຍຂອງເພິ່ນຮ້າຍໃຫ້ເພິ່ນ ເພາະພວກເຂົາບໍ່ ເຂົ້າໃຈວິທີການຂອງພຣະຜູ້ເປັນເຈົ້າ; ແລະ ພວກເຂົາ ຮ້າຍໃຫ້ ເພິ່ນເວລາທີ່ຢູ່ໃນຜືນນ້ຳ ເພາະພວກເຂົາເຮັດໃຈແຂງກະດ້າງຕໍ່ ພຣະຜູ້ເປັນເຈົ້າ.

And his brethren were wroth with him because they understood not the dealings of the Lord; they were also wroth with him upon the waters because they hardened their hearts against the Lord.

ຍງ ແລະ ອີກຢ່າງໜຶ່ງ, ພວກເຂົາຮ້າຍໃຫ້ເພິ່ນໃນເວລາມາເຖິງ ແຜ່ນດິນແຫ່ງຄຳສັນຍາ, ພວກເຂົາຫາວ່າເພິ່ນໄດ້ເອົາອຳນາດ ປົກຄອງຜູ້ຄົນໄປຈາກມືຂອງພວກເຂົາ; ແລະ ພວກເຂົາ ພະຍາຍາມທີ່ຈະຂ້າເພິ່ນເສຍ.

And again, they were wroth with him when they had arrived in the promised land, because they said that he had taken the ruling of the people out of their hands; and they sought to kill him.

ແລະ ອີກຢ່າງໜຶ່ງ, ພວກເຂົາໄດ້ຮ້າຍໃຫ້ເພີ່ນ ເພາະວ່າເພີ່ນ ໄດ້ອອກໄປໃນຖິ່ນແຫ້ງແລ້ງກັນດານ ຕາມທີ່ພຣະຜູ້ເປັນເຈົ້າໄດ້ ບັນຊາເພີ່ນ, ແລະ ນຳເອົາ ແຜ່ນຈາລຶກ ຊຶ່ງມີຂຽນໄວ້ໃນແຜ່ນ ຈາລຶກທອງເຫລືອງໄປນຳ, ເພາະພວກເຂົາກ່າວວ່າ ເພີ່ນ ລັກ ແຜ່ນຈາລຶກຂອງພວກເຂົາໄປ.

ແລະ ພວກເຂົາໄດ້ສິດສອນລູກຫລານຂອງພວກເຂົາໃຫ້ ກຽດຊັງຊາວນີໄຟແນວນັ້ນ, ແລະ ໃຫ້ຂ້າ, ໃຫ້ລັກ ແລະ ໃຫ້ປຸ້ນ ພວກເຂົາ, ແລະ ເຮັດທຸກຢ່າງທີ່ເຮັດໄດ້ເພື່ອທຳລາຍພວກເຂົາ; ສະນັ້ນ, ຊາວເລມັນ ຈຶ່ງມີຄວາມກຽດຊັງອັນບໍ່ມີວັນສິ້ນສຸດຕໍ່ລູກ ຫລານຂອງນີໄຟ.

ເພາະດ້ວຍເຫດນີ້ ກະສັດເລມັນຈຶ່ງຫລອກລວງຂ້າພະເຈົ້າ ດ້ວຍເລ່ຫລ່ຽມ ແລະ ກົນອຸບາຍຂີ້ຄົວະຂອງເພີ່ນ, ແລະ ເຮັດຄຳ ໝັ້ນສັນຍາທີ່ຈົບງາມ, ເພື່ອໃຫ້ຂ້າພະເຈົ້ານຳເອົາຜູ້ຄົນຂອງ ຂ້າພະເຈົ້າຂຶ້ນມາຫາແຜ່ນດິນນີ້, ເພື່ອພວກເຂົາຈະໄດ້ທຳລາຍ ພວກເຮົາ; ແທ້ຈິງແລ້ວ, ພວກເຮົາໄດ້ຮັບຄວາມທຸກທໍລະມານ ຢູ່ໃນແຜ່ນດິນນີ້ມາຫລາຍປີແລ້ວ.

ແລະ ບັດນີ້, ຂ້າພະເຈົ້າຊີນິບຫລັງຈາກເລົ່າເລື່ອງທັງໝົດ ກ່ຽວກັບຊາວເລມັນໃຫ້ຜູ້ຄົນຂອງຂ້າພະເຈົ້າຟັງແລ້ວ, ຂ້າພະເຈົ້າໄດ້ຊຸກຍູ້ຈິດໃຈພວກເຂົາໃຫ້ໄປສູ້ຮົບດ້ວຍພະລັງຂອງ ພວກເຂົາ ໂດຍໄວ້ວາງใจໃນພຣະຜູ້ເປັນເຈົ້າ; ສະນັ້ນ, ພວກເຮົາ ຈຶ່ງໄດ້ໄປຕໍ່ສູ້ກັບພວກເຂົາໜ້າຕໍ່ໜ້າ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ຂັບໄລ່ພວກ ເຂົາອອກຈາກແຜ່ນດິນຂອງພວກເຮົາ; ແລະ ພວກເຮົາໄດ້ຂ້າ ພວກເຂົາດ້ວຍການຂ້າອັນຍິ່ງໃຫຍ່ຈົນກະທັ່ງພວກເຮົາບໍ່ ສາມາດນັບໄດ້.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ກັບຄືນໄປຫາ ແຜ່ນດິນຂອງພວກເຮົາ, ແລະ ຜູ້ຄົນຂອງຂ້າພະເຈົ້າເລີ່ມ ລ້ຽງສັດ, ແລະ ໄຖດິນອີກ.

ແລະ ບັດນີ້ຂ້າພະເຈົ້າມີອາຍຸແກ່ຫລາຍແລ້ວ, ຂ້າພະເຈົ້າຈຶ່ງ ໄດ້ມອບອານາຈັກໃຫ້ແກ່ລູກຊາຍຜູ້ໜຶ່ງຂອງຂ້າພະເຈົ້າ; ສະນັ້ນ ຂ້າພະເຈົ້າຈະບໍ່ກ່າວຄືນອີກ. ແລະ ຂໍໃຫ້ພຣະຜູ້ເປັນເຈົ້າ ຈົ່ງໂປດປະທານພອນໃຫ້ແກ່ຜູ້ຄົນຂອງຂ້າພະເຈົ້າດ້ວຍເທີ້ນ. ອາແມນ.

And again, they were wroth with him because he departed into the wilderness as the Lord had commanded him, and took the records which were engraven on the plates of brass, for they said that he robbed them.

And thus they have taught their children that they should hate them, and that they should murder them, and that they should rob and plunder them, and do all they could to destroy them; therefore they have an eternal hatred towards the children of Nephi.

For this very cause has king Laman, by his cunning, and lying craftiness, and his fair promises, deceived me, that I have brought this my people up into this land, that they may destroy them; yea, and we have suffered these many years in the land.

And now I, Zeniff, after having told all these things unto my people concerning the Lamanites, I did stimulate them to go to battle with their might, putting their trust in the Lord; therefore, we did contend with them, face to face.

And it came to pass that we did drive them again out of our land; and we slew them with a great slaughter, even so many that we did not number them.

And it came to pass that we returned again to our own land, and my people again began to tend their flocks, and to till their ground.

And now I, being old, did confer the kingdom upon one of my sons; therefore, I say no more. And may the Lord bless my people. Amen.

โมไซยา ๑๑

Mosiah 11

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຊີນິບໄດ້ມອບລາຊາ
ອານາຈັກໃຫ້ແກ່ລູກຊາຍຜູ້ໜຶ່ງຂອງເພິ່ນຊື່ �โมอา; ສະນັ້ນ,
โมอาจึ่งเລີ່ມປົກຄອງແທນ; ແລະ ເພິ່ນບໍ່ໄດ້ເດີນໃນເສັ້ນທາງ
ຂອງບິດາຂອງເພິ່ນ.

And now it came to pass that Zeniff conferred the kingdom upon Noah, one of his sons; therefore Noah began to reign in his stead; and he did not walk in the ways of his father.

๒ ເພາະຈົ່ງເບິ່ງ, ເພິ່ນບໍ່ໄດ້ຮັກສາພຣະບັນຍັດຂອງພຣະເจ้า,
ແຕ່ເພິ່ນໄດ້ເດີນຕາມຄວາມປາດຖະໜາຂອງໃຈຕົນ. ແລະ ເພິ່ນ
ມີມະເຫສີກັບ ນາງສະໜົມຫລາຍຄົນ. ແລະ ເພິ່ນໄດ້ ເປັນເຫດ
ໃຫ້ຜູ້ຄົນຂອງເພິ່ນກະທຳບາບ ແລະ ເຮັດສິ່ງທີ່ໜ້າກຽດຊັງຕໍ່
ສາຍພຣະເນດຂອງພຣະຜູ້ເປັນເจ้า. ແທ້ຈິງແລ້ວ, ແລະ ພວກ
ເຂົາໄດ້ທຳ ການໂສເພນີ ແລະ ຄວາມຊົ່ວຮ້າຍທຸກຢ່າງ.

For behold, he did not keep the commandments of God, but he did walk after the desires of his own heart. And he had many wives and concubines. And he did cause his people to commit sin, and do that which was abominable in the sight of the Lord. Yea, and they did commit whoredoms and all manner of wickedness.

๓ ແລະ ເພິ່ນເກັບພາສີໜຶ່ງສ່ວນຫ້າຂອງທຸກຢ່າງທີ່ຜູ້ຄົນເປັນ
ເจ้າຂອງ, ໜຶ່ງສ່ວນຫ້າຂອງຄຳຂອງພວກເຂົາ ແລະ ເງິນຂອງ
ພວກເຂົາ, ແລະ ໜຶ່ງສ່ວນຫ້າຂອງ ໂລຫະຂອງພວກເຂົາ, ແລະ
ທອງແດງຂອງພວກເຂົາ, ແລະ ທອງເຫລືອງຂອງພວກເຂົາ
ແລະ ເຫລັກຂອງພວກເຂົາ; ແລະ ໜຶ່ງສ່ວນຫ້າຂອງສັດລ້ຽງ
ຂອງພວກເຂົາ; ແລະ ໜຶ່ງສ່ວນຫ້າຂອງພືດພັນທັນຍາຫານ
ຂອງພວກເຂົາ.

And he laid a tax of one fifth part of all they possessed, a fifth part of their gold and of their silver, and a fifth part of their ziff, and of their copper, and of their brass and their iron; and a fifth part of their fatlings; and also a fifth part of all their grain.

๔ ແລະ ທັງໝົດນີ້ນຳໄປເພື່ອຄ້ຳຊູຕົນເອງ ແລະ ພວກມະເຫສີ
ຂອງເພິ່ນກັບພວກນາງສະໜົມທັງໝົດຂອງເພິ່ນ; ພ້ອມດ້ວຍ
ພວກປະໂລຫິດຂອງເພິ່ນ ແລະ ເມຍຂອງພວກເຂົາກັບນາງ
ບຳເລີຂອງພວກເຂົາ; ເພິ່ນໄດ້ປ່ຽນແຜນຂອງການງານໃນ
ອານາຈັກຢ່າງນີ້.

And all this did he take to support himself, and his wives and his concubines; and also his priests, and their wives and their concubines; thus he had changed the affairs of the kingdom.

๕ ເພາະວ່າເພິ່ນໄດ້ປົດພວກປະໂລຫິດເກົ່າທັງໝົດທີ່ບິດາ
ຂອງເພິ່ນແຕ່ງຕັ້ງໄວ້, ແລະ ໄດ້ແຕ່ງຕັ້ງຜູ້ໃໝ່ຂຶ້ນແທນ, ຊຶ່ງຄົນ
ເຫລົ່ານັ້ນມີຄວາມລະເມີເພີ້ຝັນດ້ວຍຄວາມທະນົງໃຈ.

For he put down all the priests that had been consecrated by his father, and consecrated new ones in their stead, such as were lifted up in the pride of their hearts.

๖ ແທ້ຈິງແລ້ວ, ພວກນີ້ໄດ້ຮັບການຄ້ຳຈູນຢູ່ໃນຄວາມກຽດຄ້ານ
ຂອງພວກເຂົາຢູ່ດັ່ງນັ້ນ, ແລະ ໃນການນັບຖືຮູບບູຊາຂອງພວກ
ເຂົາ, ແລະ ໃນການທຳການໂສເພນີຂອງພວກເຂົາ, ໂດຍພາສີ
ຊຶ່ງກະສັດโมอาเກັບມາຈາກຜູ້ຄົນຂອງຕົນ; ຜູ້ຄົນໄດ້ທຳງານ
ໜັກທີ່ສຸດດັ່ງນັ້ນເພື່ອຄ້ຳຈູນຄວາມຊົ່ວຮ້າຍ.

Yea, and thus they were supported in their laziness, and in their idolatry, and in their whoredoms, by the taxes which king Noah had put upon his people; thus did the people labor exceedingly to support iniquity.

๗ ແທ້ຈິງແລ້ວ, ແລະ ພວກເຂົາກໍນັບຖືຮູບບູຊາຄືກັນ, ເພາະວ່າ
ພວກເຂົາໄດ້ຖືກຫລອກລວງດ້ວຍຄຳເວົ້າທີ່ບໍ່ເປັນປະໂຫຍດ
ແລະ ຄຳຍົກຍ້ອງຂອງກະສັດກັບພວກປະໂລຫິດ ເພາະພວກ
ເຂົາໄດ້ເວົ້າເລື່ອງຍົກຍ້ອງກັບຜູ້ຄົນ.

Yea, and they also became idolatrous, because they were deceived by the vain and flattering words of the king and priests; for they did speak flattering things unto them.

ຖ ແລະ ເຫດການໄດ້ບັງເກີດຂຶ້ນຄື ກະສັດໂນອາໄດ້ສ້າງອາຄານ ຫລູຫລາ ແລະ ກວ້າງໃຫຍ່ຫລາຍຫລັງ; ແລະ ປະດັບປະດາ ດ້ວຍໄມ້ລວດລາຍທີ່ງົດງາມ, ແລະ ດ້ວຍສິ່ງທີ່ມີຄ່ານາງໆ ຊະນິດ, ດ້ວຍຄຳ, ແລະ ດ້ວຍເງິນ, ແລະ ດ້ວຍເຫລັກ, ແລະ ດ້ວຍ ທອງເຫລືອງ, ແລະ ດ້ວຍໂລຫະ, ແລະ ດ້ວຍທອງແດງ;

ດ ແລະ ເພີ່ນໄດ້ສ້າງວັງອັນກວ້າງໃຫຍ່ ແລະ ບ່ອນນັ່ງໄວ້ທາງ ກາງ, ແລະ ທັງໝົດເຮັດດ້ວຍໄມ້ແນວດີ ແລະ ປະດັບປະດາ ດ້ວຍຄຳ ແລະ ເງິນ ແລະ ດ້ວຍສິ່ງຂອງທີ່ມີຄຸນຄ່າສູງ.

ຕ ແລະ ເພີ່ນໄດ້ໃຫ້ຄົນງານຂອງເພີ່ນທຳງານດ້ວຍຝີມືປານີດ ນາໆຊະນິດພາຍໃນກຳແພງຂອງພຣະວິຫານ, ແລະ ເຮັດດ້ວຍ ໄມ້ແນວດີ ແລະ ດ້ວຍທອງແດງ, ແລະ ດ້ວຍທອງເຫລືອງ.

ຕນ ແລະ ບ່ອນນັ່ງຖືກຈັດໄວ້ຕ່າງຫາກສຳລັບມະຫາປະໂລຫິດ, ຊຶ່ງຢູ່ສູງກວ່າບ່ອນນັ່ງບ່ອນອື່ນໆທັງໝົດນັ້ນ, ເພີ່ນໄດ້ໃຫ້ເອ້ ດ້ວຍຄຳສົດ; ແລະ ເຮັດຮາວພະນັກໄວ້ທາງໜ້າບ່ອນນັ່ງ, ເພື່ອ ພວກປະໂລຫິດຈະໄດ້ເອື່ອຍຕົວ ແລະ ວາງແຂນໄວ້ເທິງນັ້ນ ຂະນະທີ່ກ່າວຄຳເທັດ ແລະ ບໍ່ມີປະໂຫຍດກັບຜູ້ຄົນຂອງເພີ່ນ.

ຕສ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພີ່ນໄດ້ສ້າງ ຫໍສູງຫລັງ ໜຶ່ງຂຶ້ນໃກ້ກັບພຣະວິຫານ; ແທ້ຈິງແລ້ວ, ເປັນຫໍສູງທີ່ສຸດ, ຖ້າ ຢືນຢູ່ເທິງຍອດຫໍນັ້ນຈະຫລຽວເຫັນແຜ່ນດິນໄຊລຳກັບແຜ່ນ ດິນເຊັມລອນນຳອີກ, ຊຶ່ງເປັນແຜ່ນດິນຂອງຊາວເລມັນ; ແລະ ເພີ່ນສາມາດຫລຽວເຫັນໄດ້ຈົນກະທັ່ງທົ່ວແຜ່ນດິນອ້ອມແອ້ມ ນັ້ນ.

ຕເອ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພີ່ນໃຫ້ສ້າງຕຶກອາຄານ ຫລາຍຫລັງໃນແຜ່ນດິນໄຊລຳ; ແລະ ໃຫ້ສ້າງຫໍສູງໃຫຍ່ບ່ອນ ໜຶ່ງໄວ້ໃນເນີນພູທາງເໜືອຂອງແຜ່ນດິນໄຊລຳ, ຊຶ່ງເຄີຍເປັນ ບ່ອນລີ້ໄພສຳລັບລູກຫລານຂອງນີໄຟໃນເວລາທີ່ພວກເຂົາໜີ ອອກຈາກແຜ່ນດິນ; ແລະ ເພີ່ນເຮັດແນວນັ້ນຕາມຄວາມຮັ່ງມີ ຊຶ່ງເພີ່ນໄດ້ມາຈາກການເກັບພາສີຈາກຜູ້ຄົນ.

ຕສ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພີ່ນວາງໃຈຢູ່ກັບຂອງມີຄ່າ ຂອງເພີ່ນ, ແລະ ເພີ່ນໃຊ້ເວລາດຳລົງຊີວິດຢ່າງສະໜຸກສະບາຍ ຢູ່ກັບພວກມະເຫສີຂອງເພີ່ນ ແລະ ພວກນາງສະໜົມ ທັງຫລາຍຂອງເພີ່ນ; ແລະ ພວກປະໂລຫິດຂອງເພີ່ນກໍໄດ້ໃຊ້ ເວລາແບບນີ້ຢູ່ກັບພວກຜູ້ຍິງໂສເພນີຂອງພວກເຂົາຄືກັນ.

ສ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພີ່ນໄດ້ໃຫ້ປູກສວນອະງຸ່ນ ໄວ້ໂດຍຮອບແຜ່ນດິນ ແລະ ເພີ່ນໄດ້ໃຫ້ສ້າງເຄື່ອງປັ່ນໝາກ ອະງຸ່ນ, ແລະ ເຮັດເຫລົ້າອະງຸ່ນໄວ້ຢ່າງຫລວງຫລາຍ; ສະນັ້ນ ເພີ່ນຈຶ່ງກັບກາຍເປັນ ຄົນຕິດເຫລົ້າອະງຸ່ນ, ແລະ ຜູ້ຄົນຂອງ ເພີ່ນກໍເໝືອນກັນ.

And it came to pass that king Noah built many elegant and spacious buildings; and he ornamented them with fine work of wood, and of all manner of precious things, of gold, and of silver, and of iron, and of brass, and of ziff, and of copper;

And he also built him a spacious palace, and a throne in the midst thereof, all of which was of fine wood and was ornamented with gold and silver and with precious things.

And he also caused that his workmen should work all manner of fine work within the walls of the temple, of fine wood, and of copper, and of brass.

And the seats which were set apart for the high priests, which were above all the other seats, he did ornament with pure gold; and he caused a breastwork to be built before them, that they might rest their bodies and their arms upon while they should speak lying and vain words to his people.

And it came to pass that he built a tower near the temple; yea, a very high tower, even so high that he could stand upon the top thereof and overlook the land of Shilom, and also the land of Shemlon, which was possessed by the Lamanites; and he could even look over all the land round about.

And it came to pass that he caused many buildings to be built in the land Shilom; and he caused a great tower to be built on the hill north of the land Shilom, which had been a resort for the children of Nephi at the time they fled out of the land; and thus he did do with the riches which he obtained by the taxation of his people.

And it came to pass that he placed his heart upon his riches, and he spent his time in riotous living with his wives and his concubines; and so did also his priests spend their time with harlots.

And it came to pass that he planted vineyards round about in the land; and he built wine-presses, and made wine in abundance; and therefore he became a wine-bibber, and also his people.

ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນເລີ່ມສົ່ງຄົນມາ ໂຈມຕີຜູ້ຄົນຂອງເພີ່ນ, ໂຈມຕີຄົນກຸ່ມນ້ອຍ, ແລະ ຂ້າຜູ້ຄົນໃນ ທົ່ງຂະນະທີ່ພວກເຂົາກຳລັງລ້ຽງຝູງສັດຂອງພວກເຂົາຢູ່.

And it came to pass that the Lamanites began to come in upon his people, upon small numbers, and to slay them in their fields, and while they were tending their flocks.

ແລະ ກະສັດໂນອາໄດ້ສົ່ງທະຫານອອກໄປເວນຍາມ ອ້ອມຮອບແຜ່ນດິນເພື່ອຂັບໄລ່ພວກນັ້ນອອກໄປ; ແຕ່ວ່າເພີ່ນ ບໍ່ໄດ້ສົ່ງໄປພຽງພໍ, ແລະ ຊາວເລມັນກໍຍົກມາໂຈມຕີພວກເຂົາ ອີກ, ແລະ ກວາດເອົາຝູງສັດຂອງພວກເຂົາເປັນຈຳນວນ ຫລວງຫລາຍອອກໄປຈາກແຜ່ນດິນ; ຊາວເລມັນເລີ່ມຕົ້ນ ທຳລາຍພວກເຂົາ, ແລະ ໄດ້ສະແດງຄວາມກຽດຊັງຂອງຕົນຕໍ່ ພວກເຂົາເຊັ່ນນັ້ນ.

And king Noah sent guards round about the land to keep them off; but he did not send a sufficient number, and the Lamanites came upon them and killed them, and drove many of their flocks out of the land; thus the Lamanites began to destroy them, and to exercise their hatred upon them.

ແລະ ເຫດການໄດ້ບັງເກີດຂຶ້ນຄື ກະສັດໂນອາໄດ້ສົ່ງກອງ ທະຫານໄປຕໍ່ສູ້ກັບຊາວເລມັນ, ແລະ ຊາວເລມັນຖືກຂັບໄລ່ກັບ ຄືນໄປຊົ່ວໄລຍະໜຶ່ງ; ສະນັ້ນ, ພວກເຂົາຈຶ່ງກັບຄືນມາດ້ວຍ ຄວາມຍິນດີກັບເຄື່ອງຂອງທີ່ພວກເຂົາຍຶດມາໄດ້ຈາກຊາວເລ ມັນ.

And it came to pass that king Noah sent his armies against them, and they were driven back, or they drove them back for a time; therefore, they returned rejoicing in their spoil.

ແລະ ບັດນີ້, ຍ້ອນໄຊຊະນະອັນໃຫຍ່ຫລວງນີ້ ພວກເຂົາຈຶ່ງມີ ຄວາມລະເມີເພີ້ຝັນດ້ວຍຄວາມຫະນິງໃຈ; ພວກເຂົາໄດ້ ອວດອ້າງເຖິງກຳລັງຂອງຕົນເອງ, ໂດຍກ່າວວ່າພວກເຂົາ ຫ້າສິບຄົນຈະສາມາດຢືນຕໍ່ສູ້ກັບຊາວເລມັນໄດ້ເຖິງພັນຄົນ; ແລະ ພວກເຂົາໄດ້ອວດອ້າງແບບນີ້, ແລະ ໄດ້ຊື່ນຊົມໃນກອງ ເລືອດ, ແລະ ການນອງເລືອດຂອງພີ່ນ້ອງຂອງພວກເຂົາ, ແລະ ນີ້ເພາະຄວາມຊົ່ວຮ້າຍຂອງກະສັດ ແລະ ພວກປະໂລຫິດຂອງ ພວກເຂົາ.

And now, because of this great victory they were lifted up in the pride of their hearts; they did boast in their own strength, saying that their fifty could stand against thousands of the Lamanites; and thus they did boast, and did delight in blood, and the shedding of the blood of their brethren, and this because of the wickedness of their king and priests.

ແລະ ເຫດການໄດ້ບັງເກີດຂຶ້ນຄື ມີຊາຍຄົນໜຶ່ງໃນບັນດາ ພວກເຂົາຊື່ວ່າ ອະບິນາໄດ; ແລະ ເພີ່ນໄດ້ອອກໄປໃນບັນດາ ພວກນີ້ ແລະ ເລີ່ມທຳນາຍວ່າ: ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວ ດັ່ງນີ້, ແລະ ພຣະອົງໄດ້ບັນຊາຂ້າພະເຈົ້າດັ່ງນີ້, ມີຄວາມວ່າ, ຈົ່ງ ອອກໄປ, ແລະ ກ່າວກັບຜູ້ຄົນພວກນີ້ວ່າ, ພຣະຜູ້ເປັນເຈົ້າໄດ້ ກ່າວດັ່ງນີ້—ວິບັດແກ່ຜູ້ຄົນພວກນີ້, ເພາະເຮົາເຫັນຄວາມໜ້າ ກຽດຊັງຂອງພວກເຂົາ, ແລະ ຄວາມຊົ່ວຮ້າຍ, ແລະ ການ ໂສເພນີຂອງພວກເຂົາ; ແລະ ຖ້າຫາກພວກເຂົາບໍ່ກັບໃຈ ເຮົາ ຈະມາຢ້ຽມຢາມພວກເຂົາໃນຄວາມຄຽດແຄ້ນຂອງເຮົາ.

And it came to pass that there was a man among them whose name was Abinadi; and he went forth among them, and began to prophesy, saying: Behold, thus saith the Lord, and thus hath he commanded me, saying, Go forth, and say unto this people, thus saith the Lord—Wo be unto this people, for I have seen their abominations, and their wickedness, and their whoredoms; and except they repent I will visit them in mine anger.

ແລະ ຖ້າຫາກພວກເຂົາບໍ່ກັບໃຈຫັນໜ້າມາຫາພຣະຜູ້ເປັນ ເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ຈົ່ງເບິ່ງ, ເຮົາຈະປ່ອຍໃຫ້ ພວກເຂົາຢູ່ໃນກຳມືຂອງສັດຕູ; ແທ້ຈິງແລ້ວ, ພວກເຂົາຈະຖືກ ນຳໄປ ເປັນທາດ; ແລະ ພວກເຂົາຈະເປັນທຸກໂດຍມືຂອງສັດຕູ ຂອງພວກເຂົາ.

And except they repent and turn to the Lord their God, behold, I will deliver them into the hands of their enemies; yea, and they shall be brought into bondage; and they shall be afflicted by the hand of their enemies.

ແລະ ເຫດການຈະບັງເກີດຂຶ້ນຄື ພວກເຂົາຈະຮູ້ວ່າ ເຮົາຄື ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ແລະ ຄື ພຣະເຈົ້າທີ່ ອິດສາມາຢ້ຽມຢາມຄວາມຊົ່ວຮ້າຍຂອງຜູ້ຄົນຂອງ ເຮົາ.

And it shall come to pass that they shall know that I am the Lord their God, and am a jealous God, visiting the iniquities of my people.

ຂ ແລະ ເຫດການຈະບັງເກີດຂຶ້ນຄື ຖ້າຫາກຜູ້ຄົນພວກນີ້ບໍ່ກັບ
ใจ ແລະ ຫັນໜ້າມາຫາພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ
ພວກເຂົາແລ້ວ, ພວກເຂົາຈະຖືກນຳໄປເປັນທາດ ແລະ ຈະບໍ່ມີ
ຜູ້ໃດສາມາດປົດປ່ອຍພວກເຂົາໄດ້, ນອກຈາກພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຜູ້ຊົງລິດອຳນາດຍິ່ງໃຫຍ່ເທົ່ານັ້ນ.

ຂ ແທ້ຈິງແລ້ວ, ແລະ ເຫດການຈະບັງເກີດຂຶ້ນຄື ເວລາພວກ
ເຂົາຮ້ອງທູນຕໍ່ເຮົາ, ເຮົາຈະ ລ້າຊ້າທີ່ຈະຍິນສຽງຮ້ອງຂໍຂອງ
ພວກເຂົາ; ແທ້ຈິງແລ້ວ, ເຮົາຈະປ່ອຍໃຫ້ສັດຕູລົງໂທດພວກ
ເຂົາ.

ຂ ແລະ ຖ້າຫາກພວກເຂົາບໍ່ກັບໃຈມານຸ່ງຜ້າກະສອບ ແລະ
ເທົ່າຖ່ານ, ແລະ ຮ້ອງຂໍຢ່າງສຸດກຳລັງຕໍ່ພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງພວກເຂົາແລ້ວ, ເຮົາຈະບໍ່ ຟັງຄຳອະທິຖານຂອງ
ພວກເຂົາເລີຍ; ທັງຈະບໍ່ປົດປ່ອຍພວກເຂົາອອກຈາກຄວາມ
ທຸກຂອງພວກເຂົາ; ແລະ ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ແລະ
ພຣະອົງໄດ້ບັນຊາຂ້າພະເຈົ້າແບບນີ້.

ຂ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອອະບິນາໄດເວົ້າຂໍ້ຄວາມ
ນີ້ກັບພວກເຂົາ, ພວກເຂົາກໍຄຽດແຄ້ນໃຫ້ເພິ່ນ, ແລະ
ພະຍາຍາມຈະເອົາຊີວິດຂອງເພິ່ນ; ແຕ່ພຣະຜູ້ເປັນເຈົ້າໄດ້
ປົດປ່ອຍເພິ່ນໃຫ້ຫລຸດຈາກກຳມືຂອງພວກເຂົາ.

ຂ ບັດນີ້ເມື່ອກະສັດໂນອາໄດ້ຍິນຂໍ້ຄວາມຂອງອະບິນາໄດຈາກ
ຜູ້ຄົນແລ້ວ, ເພິ່ນກໍຄຽດແຄ້ນຄືກັນ; ແລະ ກ່າວວ່າ: ອະບິນາໄດ
ເປັນໃຜທີ່ຈະມາຕິຕຽນເຮົາ ແລະ ຜູ້ຄົນຂອງເຮົາ, ຫລື ວ່າພຣະ
ຜູ້ເປັນເຈົ້າ ອົງໃດທີ່ຈະເອົາຄວາມທຸກຢ່າງແສນສາຫັດມາໃຫ້
ຜູ້ຄົນຂອງເຮົາ?

ຂ ເຮົາສັ່ງໃຫ້ພວກເຈົ້າຈັບເອົາອະບິນາໄດມາບ່ອນນີ້ ເພື່ອເຮົາ
ຈະໄດ້ຂ້າມັນເສຍ ເພາະວ່າມັນໄດ້ກ່າວເລື່ອງເຫລົ່ານີ້ເພື່ອຍຸຍົງ
ຜູ້ຄົນຂອງເຮົາໃຫ້ຄຽດແຄ້ນໃຫ້ກັນ, ແລະ ໃຫ້ເກີດມີຄວາມ
ຜິດຖຽງກັນໃນບັນດາຜູ້ຄົນຂອງເຮົາ; ສະນັ້ນ ເຮົາຈະຂ້າມັນຖິ້ມ
ເສຍ.

ຂ ບັດນີ້ຕາຂອງຜູ້ຄົນ ບອດ; ສະນັ້ນ ພວກເຂົາຈຶ່ງເຮັດໃຈ ແຂງ
ກະດ້າງຕໍ່ຄຳຂອງອະບິນາໄດ, ແລະ ນັບຈາກນັ້ນມາ ພວກເຂົາ
ໄດ້ພະຍາຍາມທີ່ຈະຈັບເພິ່ນ. ແລະ ກະສັດໂນອາໄດ້ເຮັດໃຈຂອງ
ພວກເຂົາແຂງກະດ້າງຕໍ່ພຣະຄຳຂອງພຣະຜູ້ເປັນເຈົ້າ, ແລະ
ເພິ່ນບໍ່ໄດ້ກັບໃຈຈາກການເຮັດຄວາມຊົ່ວຂອງເພິ່ນເລີຍ.

And it shall come to pass that except this people repent and turn unto the Lord their God, they shall be brought into bondage; and none shall deliver them, except it be the Lord the Almighty God.

Yea, and it shall come to pass that when they shall cry unto me I will be slow to hear their cries; yea, and I will suffer them that they be smitten by their enemies.

And except they repent in sackcloth and ashes, and cry mightily to the Lord their God, I will not hear their prayers, neither will I deliver them out of their afflictions; and thus saith the Lord, and thus hath he commanded me.

Now it came to pass that when Abinadi had spoken these words unto them they were wroth with him, and sought to take away his life; but the Lord delivered him out of their hands.

Now when king Noah had heard of the words which Abinadi had spoken unto the people, he was also wroth; and he said: Who is Abinadi, that I and my people should be judged of him, or who is the Lord, that shall bring upon my people such great affliction?

I command you to bring Abinadi hither, that I may slay him, for he has said these things that he might stir up my people to anger one with another, and to raise contentions among my people; therefore I will slay him.

Now the eyes of the people were blinded; therefore they hardened their hearts against the words of Abinadi, and they sought from that time forward to take him. And king Noah hardened his heart against the word of the Lord, and he did not repent of his evil doings.

โมไซยา ๑๘

๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກນັ້ນເປັນເວລາສອງປີ ຄື ອະບິນາໄດໄດ້ປອມຕົວມາໃນບັນດາພວກເຂົາ ຈົນວ່າຄົນ ທັງຫລາຍຈຳເພີ່ນບໍ່ໄດ້ເລີຍ, ແລະ ເພີ່ນໄດ້ທຳນາຍໃນບັນດາ ພວກນັ້ນ, ມີຄວາມว่า: ພຣະຜູ້ເປັນເຈົ້າໄດ້ບັນຊາຂ້າພະເຈົ້າດັ່ງ ນີ້—ອະບິນາໄດ, ເຈົ້າຈົ່ງໄປທຳນາຍແກ່ຜູ້ຄົນຂອງເຮົາ, ເພາະ ພວກເຂົາໄດ້ເຮັດໃຈແຂງກະດ້າງຕໍ່ຄຳຂອງເຮົາ; ພວກເຂົາບໍ່ໄດ້ ກັບໃຈຈາກການເຮັດຄວາມຊົ່ວຂອງພວກເຂົາ; ສະນັ້ນ, ເຮົາຈະ ມາຢ້ຽມຢາມພວກເຂົາໃນຄວາມພິ�โลດຂອງເຮົາ, ແທ້ຈິງແລ້ວ, ໃນຄວາມພິ�โลດອັນຮຸນແຮງຂອງເຮົາ, ເຮົາຈະມາ ຢ້ຽມຢາມ ພວກເຂົາໃນຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງພວກ ເຂົາ.

๒ ແທ້ຈິງແລ້ວ, ວິບັດແກ່ຄົນລຸ້ນນີ້! ແລະ ພຣະຜູ້ເປັນເຈົ້າໄດ້ ກ່າວກັບຂ້າພະເຈົ້າว่า: ເຈົ້າຈົ່ງຍື່ນມືຂອງເຈົ້າອອກໄປ ແລະ ທຳນາຍว่า: ພຣະຜູ້ເປັນເຈົ້າໄດ້ກ່າວดั่งนี้, ເຫດການຈະບັງເກີດ ຂຶ້ນຄື ເພາະຄວາມຊົ່ວຮ້າຍຂອງພວກເຂົາ, ຄົນລຸ້ນນີ້ຈະຖືກນຳ ໄປເປັນ ທາດ, ແລະ ຈະຖືກ ຕົບໜ້າ; ແທ້ຈິງແລ້ວ, ແລະ ຈະຖືກ ຄົນມາກວາດເອົາໄປ, ແລະ ຖືກຂ້າຖິ້ມ; ແລະ ແຮ້ງໃນອາກາດ, ແລະ ໝາ, ແລະ ສັດປ່າຈະມາກິນເນື້ອໜັງຂອງພວກເຂົາ.

๓ ແລະ ເຫດການຈະບັງເກີດຂຶ້ນຄື ຊີວິດຂອງກະສັດໂນອາ ອາດຈະມີຄຸນຄ່າເທົ່າກັບອາພອນໃນ ເຕົາໄຟອັນຮ້ອນ; ເພື່ອເຂົາ ຈະໄດ້ຮູ້ว่า ເຮົາຄືພຣະຜູ້ເປັນເຈົ້າ.

๔ ແລະ ເຫດການຈະບັງເກີດຂຶ້ນຄື ເຮົາຈະລົງโทດຜູ້ຄົນພວກ ນີ້ຂອງເຮົາດ້ວຍຄວາມທຸກຍ່າງແສນສາຫັດ, ແທ້ຈິງແລ້ວ, ດ້ວຍ ຄວາມອຶດຢາກ ແລະ ດ້ວຍ ພະຍາດໂລຄາ; ແລະ ເຮົາຈະໃຫ້ ພວກເຂົາຮ້ອງ ຄ່ຳຄວນຕະຫລອດທັງວັນ.

๕ ແທ້ຈິງແລ້ວ, ແລະ ເຮົາຈະໃຫ້ ພາລະໜັກຕິດຢູ່ເທິງຫລັງ ຂອງພວກເຂົາ; ແລະ ຖືກໄລ່ກວາດໄປທາງໜ້າຄືກັບໂຕລໍທີ່ບໍ່ມີ ຄວາມຄິດ.

๖ ແລະ ເຫດການຈະບັງເກີດຂຶ້ນຄື ເຮົາຈະສົ່ງໝາກເຫັບໃຫ້ ຕົກລົງມາໃນບັນດາພວກເຂົາ, ແລະ ມັນຈະຕົກຖືກພວກເຂົາ; ແລະ ພວກເຂົາຈະຖືກລົງโทດດ້ວຍ ລົມຂອງຕາເວັນອອກນຳ ອີກ; ແລະ ແມງໄມ້ຈະລົງມາກິນພືດພັນໃນແຜ່ນດິນຂອງພວກ ເຂົາ.

๗ ແລະ ພວກເຂົາຈະຖືກລົງโทດດ້ວຍພະຍາດໂລຄາອັນ ຮ້າຍແຮງ—ແລະ ເຮົາຈະເຮັດທຸກຍ່າງນີ້ເພາະ ຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງພວກເຂົາ.

Mosiah 12

And it came to pass that after the space of two years that Abinadi came among them in disguise, that they knew him not, and began to prophesy among them, saying: Thus has the Lord commanded me, saying —Abinadi, go and prophesy unto this my people, for they have hardened their hearts against my words; they have repented not of their evil doings; therefore, I will visit them in my anger, yea, in my fierce anger will I visit them in their iniquities and abominations.

Yea, wo be unto this generation! And the Lord said unto me: Stretch forth thy hand and prophesy, saying: Thus saith the Lord, it shall come to pass that this generation, because of their iniquities, shall be brought into bondage, and shall be smitten on the cheek; yea, and shall be driven by men, and shall be slain; and the vultures of the air, and the dogs, yea, and the wild beasts, shall devour their flesh.

And it shall come to pass that the life of king Noah shall be valued even as a garment in a hot furnace; for he shall know that I am the Lord.

And it shall come to pass that I will smite this my people with sore afflictions, yea, with famine and with pestilence; and I will cause that they shall howl all the day long.

Yea, and I will cause that they shall have burdens lashed upon their backs; and they shall be driven before like a dumb ass.

And it shall come to pass that I will send forth hail among them, and it shall smite them; and they shall also be smitten with the east wind; and insects shall pester their land also, and devour their grain.

And they shall be smitten with a great pestilence—and all this will I do because of their iniquities and abominations.

ຖ ແລະ ເຫດການຈະບັງເກີດຂຶ້ນຄື ຖ້າຫາກພວກເຂົາບໍ່ກັບໃຈ ເຮົາຈະ ທຳລາຍພວກເຂົາໃຫ້ໝົດສິ້ນໄປຈາກຜືນແຜ່ນດິນ ໂລກ; ເຖິງຢ່າງໃດກໍຕາມ ພວກເຂົາຈະປະ ບັນທຶກໜຶ່ງໄວ້ ເພື່ອ ຈະໄດ້ຮັກສາມັນໄວ້ໃຫ້ປະຊາຊາດອື່ນທີ່ຈະມາເປັນເຈົ້າຂອງ ແຜ່ນດິນ; ແທ້ຈິງແລ້ວ, ເຮົາເຮັດໄປເພື່ອເຮົາຈະເປີດໂສມໜ້າ ຂອງຜູ້ຄົນພວກນີ້ແກ່ປະຊາຊາດອື່ນ. ແລະ ອະບິນາໄດໄດ້ ທຳນາຍແກ່ຜູ້ຄົນພວກນີ້ຫລາຍເລື່ອງ.

And it shall come to pass that except they repent I will utterly destroy them from off the face of the earth; yet they shall leave a record behind them, and I will preserve them for other nations which shall possess the land; yea, even this will I do that I may discover the abominations of this people to other nations. And many things did Abinadi prophesy against this people.

ດ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາຄຽດແຄ້ນໃຫ້ ເພີ່ນ; ແລະ ພວກເຂົາໄດ້ຈັບມັດເພີ່ນ ແລະ ພາເພີ່ນໄປຢູ່ຕໍ່ໜ້າ ກະສັດ, ແລະ ກ່າວກັບກະສັດວ່າ: ຈົ່ງເບິ່ງ, ພວກຂ້ານ້ອຍໄດ້ຈັບ ເອົາຄົນຜູ້ນີ້ມາຢູ່ຕໍ່ໜ້າທ່ານ ຜູ້ໄດ້ທຳນາຍເຖິງຄວາມຊົ່ວ ກ່ຽວກັບຜູ້ຄົນຂອງທ່ານ, ແລະ ກ່າວວ່າພຣະເຈົ້າຈະທຳລາຍ ພວກເຂົາ.

And it came to pass that they were angry with him; and they took him and carried him bound before the king, and said unto the king: Behold, we have brought a man before thee who has prophesied evil concerning thy people, and saith that God will destroy them.

ເ ແລະ ລາວໄດ້ທຳນາຍເຖິງຄວາມຊົ່ວກ່ຽວກັບຊີວິດຂອງທ່ານ ນຳອີກ, ແລະ ກ່າວວ່າຊີວິດຂອງທ່ານຈະເປັນຄືກັນກັບອາພອນ ໃນເຕົາໄຟ.

And he also prophesieth evil concerning thy life, and saith that thy life shall be as a garment in a furnace of fire.

ແ ແລະ ລາວໄດ້ເວົ້າອີກว່າ, ທ່ານຈະເປັນຄືກັນກັບຕົ້ນເຂົ້າທີ່ ແຫ້ງໃນທົ່ງ, ຊຶ່ງຖືກຝູງສັດແລ່ນທັບ ແລະ ຢຽບຍ່ຳຢູ່ໃຕ້ຕີນ.

And again, he saith that thou shalt be as a stalk, even as a dry stalk of the field, which is run over by the beasts and trodden under foot.

ແ ແລະ ອີກຢ່າງໜຶ່ງ, ລາວກ່າວວ່າ ທ່ານຈະເປັນຄືດອກໄມ້ຂອງ ຕົ້ນໜາມ ຊຶ່ງເວລາມັນບານເຕັມທີ່, ຖ້າລົມພັດມາ ມັນຈະປິ້ວ ໄປທົ່ວແຜ່ນດິນ. ແລະ ລາວອ້າງວ່າພຣະຜູ້ເປັນເຈົ້າໄດ້ຮັບສັ່ງ ເລື່ອງນີ້. ແລະ ລາວເວົ້າວ່າທັງໝົດນີ້ຈະເກີດກັບທ່ານ ຖ້າຫາກ ທ່ານບໍ່ກັບໃຈ, ແລະ ນີ້ເພາະຄວາມຊົ່ວຮ້າຍຂອງທ່ານ.

And again, he saith thou shalt be as the blossoms of a thistle, which, when it is fully ripe, if the wind bloweth, it is driven forth upon the face of the land. And he pretendeth the Lord hath spoken it. And he saith all this shall come upon thee except thou repent, and this because of thine iniquities.

ແ ແລະ ບັດນີ້, ໂอ້ ກະສັດເอີຍ ທ່ານໄດ້ເຮັດຄວາມຊົ່ວອັນ ໃຫຍ່ຫລວງແນວໃດ, ຫລື ຜູ້ຄົນຂອງທ່ານໄດ້ກະທຳບາບອັນ ໃຫຍ່ຫລວງແນວໃດ, ຈົນວ່າພວກເຮົາຖືກພຣະເຈົ້າລົງโทດ ຫລື ຄົນຜູ້ນີ້ຕັດສິນເอົາເอງ?

And now, O king, what great evil hast thou done, or what great sins have thy people committed, that we should be condemned of God or judged of this man?

ແ ແລະ ບັດນີ້, ໂอ້ ກະສັດເอີຍ ພວກເຮົາບໍ່ມີຄວາມຜິດ, ແລະ ໂอ້ ກະສັດເอີຍ ທ່ານບໍ່ໄດ້ເຮັດບາບແນວໃດເລີຍ; ສະນັ້ນ, ຄົນຜູ້ ນີ້ຈຶ່ງເວົ້າຕົວະກ່ຽວກັບທ່ານ ແລະ ລາວທຳນາຍໄປລ້ຳໆ.

And now, O king, behold, we are guiltless, and thou, O king, hast not sinned; therefore, this man has lied concerning you, and he has prophesied in vain.

ແ ຈົ່ງເບິ່ງ, ພວກເຮົາເຂັ້ມແຂງ, ພວກເຮົາຈະບໍ່ໄປສູ່ຄວາມເປັນ ທາດຢ່າງເດັດຂາດ, ຫລື ຖືກສັດຕູເอົາໄປເປັນຊະເລີຍ; ແທ້ຈິງ ແລ້ວ, ທ່ານເປັນຜູ້ຈະເລີນຮຸ່ງເรืองໃນແຜ່ນດິນ ແລະ ຈະ ຈະເລີນຮຸ່ງເรืองຕໍ່ໄປ.

And behold, we are strong, we shall not come into bondage, or be taken captive by our enemies; yea, and thou hast prospered in the land, and thou shalt also prosper.

ແ ຈົ່ງເບິ່ງ, ນີ້ຄືຄົນຜູ້ທີ່ພວກຂ້ານ້ອຍຈະມອບໃຫ້ຢູ່ໃນມືຂອງ ທ່ານ; ທ່ານຈົ່ງເຮັດກັບລາວສຸດແລ້ວແຕ່ທ່ານຈະເຫັນດີ.

Behold, here is the man, we deliver him into thy hands; thou mayest do with him as seemeth thee good.

ແລະ ເຫດການໄດ້ບັງເກີດຂຶ້ນຄື ກະສັດโมอาได้สั่งให้เอิาอะบินาไดเข้าคุก; ແລະ ເພີ່ນໄດ້ສັ່ງໃຫ້ ພວກປະໂລຫິດມາເຕົ້າໂຮມກັນເພື່ອຈະມີກອງປະຊຸມປຶກສາຫາລືກັນວ່າ ຈະເຮັດແນວໃດກັບເພີ່ນ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາກ່າວກັບກະສັດວ່າ: ຈົ່ງເອົາຄົນຜູ້ນັ້ນມານີ້ ເພື່ອພວກເຮົາຈະໄດ້ຊັກຖາມ; ແລະ ກະສັດໄດ້ສັ່ງໃຫ້ນຳເອົາອະບິນາໄດມາຢູ່ຕໍ່ໜ້າພວກເຂົາ.

ແລະ ພວກເຂົາເລີ່ມສອບຖາມເພີ່ນ, ເພື່ອຈະໄດ້ຈັບເອົາຄວາມຜິດຈາກເພີ່ນ, ເພື່ອພວກເຂົາຈະມີອັນໃດອັນໜຶ່ງເພື່ອກ່າວຫາເພີ່ນ; ແຕ່ເພີ່ນໄດ້ຕອບພວກເຂົາຢ່າງອາດຫານ, ແລະ ແກ້ຄຳຖາມຂອງພວກເຂົາໄດ້ທຸກຂໍ້, ແທ້ຈິງແລ້ວ, ໄດ້ເຮັດໃຫ້ພວກເຂົາປະຫລາດໃຈ; ເພາະເພີ່ນຕອບຄຳຖາມຂອງພວກເຂົາໄດ້ທຸກຂໍ້, ແລະ ເຮັດໃຫ້ພວກເຂົາຍອມຈຳນົນໃນຄຳເວົ້າຂອງພວກເຂົາເອງ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ຄົນຜູ້ໜຶ່ງໃນພວກເຂົາກ່າວກັບອະບິນາໄດว่า: ຂໍ້ຄວາມຊຶ່ງຂຽນໄວ້, ແລະ ຊຶ່ງບັນພະບຸລຸດໄດ້ສິດສອນໄວ້ໝາຍຄວາມວ່າແນວໃດ, ທີ່ວ່າ:

ຕີນຂອງຜູ້ທີ່ຢູ່ເທິງພູນັ້ນງາມ ພຽງໃດ ຜູ້ທີ່ໄດ້ນຳເອົາຂ່າວປະເສີດມາ; ທີ່ໄດ້ປະກາດສັນຕິສຸກ; ທີ່ນຳເອົາຂ່າວປະເສີດຂອງຄວາມດີມາ; ທີ່ປະກາດຄວາມລອດ; ທີ່ກ່າວກັບຊີໂອນว่า ພຣະເຈົ້າຂອງເຈົ້າຊົງປົກຄອງ;

ຄົນຍາມຂອງເຈົ້າຈະເປົ່ງສຽງ; ພວກເຂົາຈະຮ້ອງເປັນສຽງດຽວກັນ; ເພາະພວກເຂົາຈະເຫັນກັບຕາ ເວລາພຣະຜູ້ເປັນເຈົ້າຈະນຳເອົາຊີໂອນກັບຄືນມາອີກ;

ຈົ່ງເປົ່ງສຽງປິຕິຍິນດີ; ຮ້ອງເພງນຳກັນ, ກຸງເຢຣູຊາເລັມເອີຍ ເຈົ້າຜູ້ທີ່ເປັນເມືອງຮົກຮ້າງ; ເພາະພຣະຜູ້ເປັນເຈົ້າໄດ້ອອຍໃຈ ຜູ້ຄົນຂອງພຣະອົງແລ້ວ, ພຣະອົງໄດ້ໄຖ່ກຸງເຢຣູຊາເລັມແລ້ວ;

ພຣະຜູ້ເປັນເຈົ້າໄດ້ກາງ ແຂນອັນສັກສິດຂອງພຣະອົງໃນສາຍຕາຂອງປະຊາຊາດທັງປວງ, ແລະ ທົ່ວທີ່ສຸດຂອງແຜ່ນດິນໂລກຈະເຫັນການຊ່ວຍໃຫ້ລອດຂອງພຣະເຈົ້າຂອງພວກເຮົາ.

ແລະ ບັດນີ້ອະບິນາໄດກ່າວກັບພວກເຂົາว่า: ພວກທ່ານເປັນປະໂລຫິດແມ່ນບໍ, ແລະ ອ້າງຕົນເອງເພື່ອສິດສອນຜູ້ຄົນພວກນີ້, ແລະ ເຂົ້າໃຈວິນຍານແຫ່ງການທຳນາຍແລ້ວ, ແລະ ປານນັ້ນຍັງປາດຖະໜາຢາກຮູ້ຈັກຈາກຂ້າພະເຈົ້າว่า ສິ່ງເຫລົ່ານີ້ໝາຍຄວາມວ່າແນວໃດ?

And it came to pass that king Noah caused that Abinadi should be cast into prison; and he commanded that the priests should gather themselves together that he might hold a council with them what he should do with him.

And it came to pass that they said unto the king: Bring him hither that we may question him; and the king commanded that he should be brought before them.

And they began to question him, that they might cross him, that thereby they might have wherewith to accuse him; but he answered them boldly, and withstood all their questions, yea, to their astonishment; for he did withstand them in all their questions, and did confound them in all their words.

And it came to pass that one of them said unto him: What meaneth the words which are written, and which have been taught by our fathers, saying:

How beautiful upon the mountains are the feet of him that bringeth good tidings; that publisheth peace; that bringeth good tidings of good; that publisheth salvation; that saith unto Zion, Thy God reigneth;

Thy watchmen shall lift up the voice; with the voice together shall they sing; for they shall see eye to eye when the Lord shall bring again Zion;

Break forth into joy; sing together ye waste places of Jerusalem; for the Lord hath comforted his people, he hath redeemed Jerusalem;

The Lord hath made bare his holy arm in the eyes of all the nations, and all the ends of the earth shall see the salvation of our God?

And now Abinadi said unto them: Are you priests, and pretend to teach this people, and to understand the spirit of prophesying, and yet desire to know of me what these things mean?

ຂ້າພະເຈົ້າກ່າວກັບພວກທ່ານວ່າ, ວິບັດແກ່ພວກທ່ານ ເພາະວ່າພວກທ່ານບິດເບືອນທາງຂອງພຣະຜູ້ເປັນເຈົ້າ! ເພາະວ່າຖ້າຫາກພວກທ່ານເຂົ້າໃຈເລື່ອງເຫລົ່ານີ້ ເປັນຫຍັງ ພວກທ່ານຈຶ່ງບໍ່ສິດສອນພວກເຂົາ; ສະນັ້ນ, ພວກທ່ານໄດ້ບິດ ເບືອນທາງຂອງພຣະຜູ້ເປັນເຈົ້າ.

I say unto you, wo be unto you for perverting the ways of the Lord! For if ye understand these things ye have not taught them; therefore, ye have perverted the ways of the Lord.

ພວກທ່ານບໍ່ໄດ້ຕັ້ງໃຈເພື່ອໃຫ້ ເຂົ້າໃຈເລີຍ; ສະນັ້ນ, ພວກ ທ່ານຈຶ່ງບໍ່ສະຫລາດ. ສະນັ້ນ, ພວກທ່ານສິດສອນສິ່ງໃດແດ່ ກັບຜູ້ຄົນພວກນີ້?

Ye have not applied your hearts to understanding; therefore, ye have not been wise. Therefore, what teach ye this people?

ແລະ ພວກເຂົາຕອບວ່າ: ພວກເຮົາສິດສອນກົດຂອງໂມເຊ.

And they said: We teach the law of Moses.

ແລະ ເພີ່ນໄດ້ກ່າວກັບພວກເຂົາອີກว่า: ຖ້າຫາກພວກທ່ານ ສິດສອນ ກົດຂອງໂມເຊແລ້ວ ເປັນຫຍັງພວກທ່ານຈຶ່ງບໍ່ຮັກສາ ມັນ? ເປັນຫຍັງພວກທ່ານຈຶ່ງໝົກໝຸ້ນຢູ່ກັບຂອງມີຄ່າ? ເປັນ ຫຍັງພວກທ່ານຈຶ່ງທຳ ການໂສເພນີ ແລະ ໃຊ້ກຳລັງຂອງພວກ ທ່ານກັບພວກຜູ້ຍິງໂສເພນີ, ແທ້ຈິງແລ້ວ, ເປັນເຫດໃຫ້ຜູ້ຄົນ ພວກນີ້ກະທຳບາບນຳກັນອີກ, ຈົນເປັນເຫດໃຫ້ພຣະຜູ້ເປັນເຈົ້າ ສົ່ງຂ້າພະເຈົ້າມາທຳນາຍແກ່ຜູ້ຄົນພວກນີ້, ແທ້ຈິງແລ້ວ, ຄວາມຊົ່ວອັນໃຫຍ່ຫລວງຈະມາລົງໂທດຜູ້ຄົນພວກນີ້?

And again he said unto them: If ye teach the law of Moses why do ye not keep it? Why do ye set your hearts upon riches? Why do ye commit whoredoms and spend your strength with harlots, yea, and cause this people to commit sin, that the Lord has cause to send me to prophesy against this people, yea, even a great evil against this people?

ພວກທ່ານບໍ່ຮູ້ຈັກບໍว่า ຂ້າພະເຈົ້າເວົ້າຄວາມຈິງ? ແທ້ຈິງ ແລ້ວ, ພວກທ່ານຮູ້ຈັກว่าຂ້າພະເຈົ້າເວົ້າຄວາມຈິງ; ແລະ ພວກ ທ່ານຄວນຈະສັ່ນສະທ້ານຢູ່ຕໍ່ພຣະພັກຂອງພຣະເຈົ້າ.

Know ye not that I speak the truth? Yea, ye know that I speak the truth; and you ought to tremble before God.

ແລະ ເຫດການຈະບັງເກີດຂຶ້ນຄື ພວກທ່ານຈະຖືກລົງໂທດ ເພາະຄວາມຊົ່ວຮ້າຍຂອງພວກທ່ານ, ເພາະພວກທ່ານກ່າວວ່າ ພວກທ່ານສິດສອນກົດຂອງໂມເຊນັ້ນ. ແລະ ພວກທ່ານຮູ້ຈັກ ຫຍັງແດ່ກ່ຽວກັບກົດຂອງໂມເຊ? ຄວາມລອດມາເຖິງໂດຍທາງ ກົດຂອງໂມເຊ ບໍ? ພວກທ່ານຈະຕອບວ່າແນວໃດ?

And it shall come to pass that ye shall be smitten for your iniquities, for ye have said that ye teach the law of Moses. And what know ye concerning the law of Moses? Doth salvation come by the law of Moses? What say ye?

ແລະ ພວກເຂົາໄດ້ຕອບว่า ຄວາມລອດມາເຖິງໂດຍທາງກົດ ຂອງໂມເຊ.

And they answered and said that salvation did come by the law of Moses.

ແຕ່ບັດນີ້ອະບິນາໄດໄດ້ກ່າວກັບພວກເຂົາว่า: ຂ້າພະເຈົ້າ ຮູ້ຈັກว่า ຖ້າຫາກພວກທ່ານຮັກສາພຣະບັນຍັດຂອງພຣະເຈົ້າ ແລ້ວ ພວກທ່ານຈະລອດ; ແທ້ຈິງແລ້ວ, ຖ້າຫາກພວກທ່ານ ຮັກສາພຣະບັນຍັດທີ່ພຣະຜູ້ເປັນເຈົ້າໄດ້ນຳມາໃຫ້ໂມເຊຢູ່ເທິງ ພູຊີນາຍ, ກ່າວว່า:

But now Abinadi said unto them: I know if ye keep the commandments of God ye shall be saved; yea, if ye keep the commandments which the Lord delivered unto Moses in the mount of Sinai, saying:

ເຮົາຄືພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າ, ຜູ້ ພາເຈົ້າ ອອກຈາກແຜ່ນດິນເອຢິບ, ອອກຈາກບ້ານເຮືອນແຫ່ງຄວາມ ເປັນທາດ.

I am the Lord thy God, who hath brought thee out of the land of Egypt, out of the house of bondage.

ເຈົ້າຈະບໍ່ມີພຣະເຈົ້າອົງ ອື່ນຕໍ່ໜ້າເຮົາ.

Thou shalt have no other God before me.

ເຈົ້າຈະບໍ່ເຮັດຮູບຄວັດສະຫລັກອັນໃດສຳລັບຕົນເອງ ຫລື ເຮັດຮູບສົມມຸດໃນສະຫວັນເບື້ອງເທິງ, ຫລື ສິ່ງຂອງຊຶ່ງຢູ່ໃນ ແຜ່ນດິນເບື້ອງລຸ່ມ.

Thou shalt not make unto thee any graven image, or any likeness of any thing in heaven above, or things which are in the earth beneath.

ມ.ກ ບັດນີ້ອະບີນາໄດກ່າວກັບພວກເຂົາວ່າ, ພວກທ່ານເຮັດ ເລື່ອງທັງໝົດນີ້ແລ້ວບໍ? ຂ້າພະເຈົ້າກ່າວກັບພວກທ່ານ ວ່າ, ບໍ່ ເລີຍ, ພວກທ່ານບໍ່ໄດ້ເຮັດ. ແລະ ພວກທ່ານ ສິດສອນຜູ້ຄົນ ພວກນີ້ໃຫ້ພວກເຂົາເຮັດສິ່ງເຫລົ່ານີ້ທັງໝົດແລ້ວບໍ? ຂ້າພະເຈົ້າກ່າວກັບພວກທ່ານວ່າ, ບໍ່ເລີຍ, ພວກທ່ານບໍ່ໄດ້ສິດ ສອນ.

Now Abinadi said unto them, Have ye done all this? I say unto you, Nay, ye have not. And have ye taught this people that they should do all these things? I say unto you, Nay, ye have not.

ໂມໄຊຢາ ๑ມ

๑ ແລະ ບັດນີ້ເມື່ອກະສັດໄດ້ຍິນຂໍ້ຄວາມເຫລົ່ານີ້ແລ້ວ, ເພີ່ນໄດ້ກ່າວກັບປະໂລຫິດຂອງເພີ່ນວ່າ: ເອົາຄົນນີ້ໄປຂ້າຖິ້ມເສຍ; ເພາະວ່າພວກເຮົາບໍ່ມີຫຍັງຫຍຸ້ງກ່ຽວກັບມັນແລ້ວ, ເພາະວ່າ ມັນເປັນບ້າ.

๒ ແລະ ພວກເຂົາອອກມາ ແລະ ພະຍາຍາມທີ່ຈະຈັບອະບິນາ ໄດ; ແຕ່ເພີ່ນໄດ້ຕ້ານທານໄວ້, ແລະ ກ່າວກັບພວກເຂົາວ່າ:

๓ ຢ່າໄດ້ແຕະຕ້ອງຂ້າພະເຈົ້າເລີຍ, ເພາະວ່າພຣະເຈົ້າຈະ ລົງโทດພວກທ່ານຖ້າຫາກພວກທ່ານແຕະຕ້ອງຂ້າພະເຈົ້າ, ເພາະວ່າຂ້າພະເຈົ້າຍັງບໍ່ທັນໄດ້ແຈ້ງຂ່າວ ຊຶ່ງພຣະຜູ້ເປັນເຈົ້າສົ່ງ ຂ້າພະເຈົ້າມາ; ທັງຂ້າພະເຈົ້າຍັງບໍ່ທັນໄດ້ບອກເລື່ອງ ຊຶ່ງ ພຣະອົງໄດ້ໃຫ້ຂ້າພະເຈົ້າ ມາບອກ; ສະນັ້ນ, ພຣະເຈົ້າຈະບໍ່ຍອມ ໃຫ້ຂ້າພະເຈົ້າຖືກທຳລາຍໃນເວລານີ້ຢ່າງເດັດຂາດ.

๔ ແຕ່ຂ້າພະເຈົ້າຕ້ອງເຮັດໃຫ້ພຣະບັນຍັດສຳເລັດຕາມທີ່ ພຣະເຈົ້າໄດ້ບັນຊາຂ້າພະເຈົ້າ; ແລະ ເພາະວ່າຂ້າພະເຈົ້າບອກ ຄວາມຈິງແກ່ພວກທ່ານ, ພວກທ່ານຈຶ່ງຄຽດແຄ້ນໃຫ້ ຂ້າພະເຈົ້າ. ແລະ ອີກຢ່າງໜຶ່ງ, ເພາະຂ້າພະເຈົ້າເວົ້າພຣະຄຳ ຂອງພຣະເຈົ້າ ພວກທ່ານຈຶ່ງຕັດສິນວ່າຂ້າພະເຈົ້າເປັນບ້າ.

๕ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກອະບິນາໄດໄດ້ ກ່າວຂໍ້ຄວາມນີ້ແລ້ວ, ຄົນຂອງກະສັດຂອງໂນອາຈຶ່ງບໍ່ກ້າຈັບ ເພີ່ນ, ເພາະວ່າພຣະວິນຍານຂອງພຣະຜູ້ເປັນເຈົ້າໄດ້ມາສະຖິດ ຢູ່ກັບເພີ່ນ; ແລະ ໃບໜ້າຂອງເພີ່ນສົ່ງ ແສງສະຫວ່າງອອກມາ ດ້ວຍລັດສະໝີຄືກັນກັບຕອນທີ່ໄດ້ເກີດກັບໂມເຊເວລາຢູ່ຈອມພູ ຊີນາຍ, ເວລາເພີ່ນສົນທະນາກັບພຣະຜູ້ເປັນເຈົ້າ.

๖ ແລະ ອະບິນາໄດໄດ້ເວົ້າດ້ວຍ ອຳນາດ ແລະ ສິດອຳນາດຈາກ ພຣະເຈົ້າ; ແລະ ເພີ່ນໄດ້ເວົ້າຕໍ່ໄປ, ໂດຍກ່າວວ່າ:

๗ ພວກທ່ານເຫັນຢູ່ວ່າ ພວກທ່ານບໍ່ມີອຳນາດຈະຂ້າ ຂ້າພະເຈົ້າໄດ້, ສະນັ້ນ ຂ້າພະເຈົ້າຈຶ່ງຂໍຈົບຂ່າວສານຂອງ ຂ້າພະເຈົ້າ. ແທ້ຈິງແລ້ວ, ແລະ ຂ້າພະເຈົ້າເຫັນວ່າມັນ ແຕະຕ້ອງ ໃຈພວກທ່ານ ເພາະວ່າຂ້າພະເຈົ້າບອກເຖິງຄວາມຈິງກ່ຽວກັບ ຄວາມຊົ່ວຮ້າຍຂອງພວກທ່ານ.

๘ ແທ້ຈິງແລ້ວ, ແລະ ຄຳເວົ້າຂອງຂ້າພະເຈົ້າເຮັດໃຫ້ພວກທ່ານ ເຕັມໄປດ້ວຍຄວາມສົງໄສ ແລະ ປະຫລາດໃຈ, ແລະ ດ້ວຍຄວາມ ຄຽດແຄ້ນ.

๙ ແຕ່ຂ້າພະເຈົ້າຈົບຂ່າວຂອງຂ້າພະເຈົ້າ; ແລະ ບໍ່ສຳຄັນເລີຍວ່າ ຂ້າພະເຈົ້າຈະໄປໃສຖ້າຫາກເປັນໄປວ່າຂ້າພະເຈົ້າລອດ.

๑๐ ແຕ່ຂ້າພະເຈົ້າຂໍບອກພວກທ່ານໄວ້ເທົ່ານີ້, ສິ່ງໃດກໍຕາມທີ່ ພວກທ່ານກະທຳກັບຂ້າພະເຈົ້າຫລັງຈາກນີ້ ຍ່ອມເປັນຮູບ ແບບ ແລະ ຮູບລັກສະນະຂອງສິ່ງທີ່ຈະມາເຖິງ.

Mosiah 13

And now when the king had heard these words, he said unto his priests: Away with this fellow, and slay him; for what have we to do with him, for he is mad.

And they stood forth and attempted to lay their hands on him; but he withstood them, and said unto them:

Touch me not, for God shall smite you if ye lay your hands upon me, for I have not delivered the message which the Lord sent me to deliver; neither have I told you that which ye requested that I should tell; therefore, God will not suffer that I shall be destroyed at this time.

But I must fulfil the commandments wherewith God has commanded me; and because I have told you the truth ye are angry with me. And again, because I have spoken the word of God ye have judged me that I am mad.

Now it came to pass after Abinadi had spoken these words that the people of king Noah durst not lay their hands on him, for the Spirit of the Lord was upon him; and his face shone with exceeding luster, even as Moses' did while in the mount of Sinai, while speaking with the Lord.

And he spake with power and authority from God; and he continued his words, saying:

Ye see that ye have not power to slay me, therefore I finish my message. Yea, and I perceive that it cuts you to your hearts because I tell you the truth concerning your iniquities.

Yea, and my words fill you with wonder and amazement, and with anger.

But I finish my message; and then it matters not whither I go, if it so be that I am saved.

But this much I tell you, what you do with me, after this, shall be as a type and a shadow of things which are to come.

๑๑	ແລະ ບັດນີ້ຂ້າພະເຈົ້າຈະອ່ານ ພຣະບັນຍັດສ່ວນທີ່ຍັງເຫລືອ ຢູ່ຂອງພຣະເຈົ້າ, ເພາະຂ້າພະເຈົ້າເຫັນວ່າມັນບໍ່ມີຂຽນໄວ້ໃນໃຈ ຂອງພວກທ່ານເລີຍ; ຂ້າພະເຈົ້າເຫັນວ່າ ພວກທ່ານໄດ້ສຶກສາ ແລະ ສິດສອນຄວາມຊົ່ວຮ້າຍເປັນສ່ວນໃຫຍ່ຕະຫລອດຊີວິດ ຂອງພວກທ່ານ.	And now I read unto you the remainder of the commandments of God, for I perceive that they are not written in your hearts; I perceive that ye have studied and taught iniquity the most part of your lives.
๑๘	ແລະ ບັດນີ້, ຈົ່ງຈື່ຈຳຄຳທີ່ຂ້າພະເຈົ້າກ່າວກັບພວກທ່ານວ່າ: ທ່ານບໍ່ຄວນເຮັດຮູບ ຫລື ຮູບຄວັດສະຫລັກອັນໃດໄວ້ສຳລັບ ຕົນເອງ, ຫລື ຮູບສົມມຸດສິ່ງຂອງອັນໃດໃນສະຫວັນ, ຫລື ສິ່ງຂອງໃນແຜ່ນດິນເບື້ອງລຸ່ມ, ຫລື ສິ່ງຂອງຢູ່ໃນນ້ຳໃຕ້ ແຜ່ນດິນ.	And now, ye remember that I said unto you: Thou shalt not make unto thee any graven image, or any likeness of things which are in heaven above, or which are in the earth beneath, or which are in the water under the earth.
๑๙	ແລະ ອີກຢ່າງໜຶ່ງ: ເຈົ້າຈະບໍ່ກາບໄຫວ້ມັນ, ຫລື ຮັບໃຊ້ມັນ; ເພາະວ່າເຮົາພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງເຈົ້າເປັນ ພຣະເຈົ້າທີ່ອິດສາ, ຊຶ່ງຈະມາຢ້ຽມຢາມຄວາມຊົ່ວຮ້າຍຂອງ ບັນພະບຸລຸດທັງລູກຫລານ, ຈົນເຖິງຄົນລຸ້ນທີສາມ ແລະ ທີສີ່ ຂອງພວກເຂົາທີ່ກຽດຊັງເຮົາ;	And again: Thou shalt not bow down thyself unto them, nor serve them; for I the Lord thy God am a jealous God, visiting the iniquities of the fathers upon the children, unto the third and fourth generations of them that hate me;
๑๔	ແລະ ຈະສະແດງຄວາມເມດຕາແກ່ຫລາຍພັນຄົນທີ່ຮັກເຮົາ ແລະ ຮັກສາບັນຍັດຂອງເຮົາ.	And showing mercy unto thousands of them that love me and keep my commandments.
๑๕	ເຈົ້າຈະບໍ່ໃຊ້ພຣະນາມຂອງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າ ຂອງເຈົ້າໄປໃນທາງຊົ່ວຮ້າຍ; ເພາະພຣະຜູ້ເປັນເຈົ້າຈະບໍ່ຖືວ່າ ຜູ້ ທີ່ໃຊ້ພຣະນາມຂອງພຣະອົງໄປໃນທາງຊົ່ວຮ້າຍບໍ່ມີຄວາມຜິດ.	Thou shalt not take the name of the Lord thy God in vain; for the Lord will not hold him guiltless that taketh his name in vain.
๑๖	ຈົ່ງລະນຶກເຖິງວັນ ຊະບາໂຕ, ແລະ ຮັກສາມັນໃຫ້ສັກສິດ.	Remember the sabbath day, to keep it holy.
๑๗	ເຈົ້າຈົ່ງເຮັດວຽກຫົກມື້, ແລະ ເຮັດວຽກທັງໝົດຂອງເຈົ້າໃຫ້ ແລ້ວ;	Six days shalt thou labor, and do all thy work;
๑๘	ແຕ່ມື້ທີເຈັດ, ວັນຊະບາໂຕຂອງພຣະຜູ້ເປັນເຈົ້າອົງເປັນ ພຣະເຈົ້າຂອງເຈົ້າ, ເຈົ້າຈະບໍ່ທຳງານໃດໆ, ເຈົ້າພ້ອມທັງລູກຊາຍ ຂອງເຈົ້າ, ທັງລູກສາວຂອງເຈົ້າ, ພ້ອມທັງຄົນໃຊ້ຜູ້ຊາຍຂອງ ເຈົ້າ ແລະ ຄົນໃຊ້ຜູ້ຍິງຂອງເຈົ້າ, ທັງຝູງງົວຂອງເຈົ້າ, ທັງຄົນ ແປກໜ້າທີ່ຢູ່ໃນປະຕູບ້ານຂອງເຈົ້າ;	But the seventh day, the sabbath of the Lord thy God, thou shalt not do any work, thou, nor thy son, nor thy daughter, thy man-servant, nor thy maid-servant, nor thy cattle, nor thy stranger that is within thy gates;
๑๙	ເພາະວ່າພຣະຜູ້ເປັນເຈົ້າໄດ້ສ້າງສະຫວັນ ແລະ ແຜ່ນດິນ ໂລກ, ແລະ ທະເລ, ແລະ ທຸກສິ່ງທຸກຢ່າງ ຢູ່ໃນນັ້ນພາຍໃນ ຫົກ ມື້; ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງອວຍພອນວັນຊະບາໂຕ, ແລະ ເຮັດໃຫ້ມັນສັກສິດ.	For in six days the Lord made heaven and earth, and the sea, and all that in them is; wherefore the Lord blessed the sabbath day, and hallowed it.
๘๐	ຈົ່ງ ນັບຖືບິດາມານດາຂອງເຈົ້າ, ເພື່ອວັນເວລາຂອງເຈົ້າຈະ ຍາວນານຢູ່ໃນແຜ່ນດິນ ຊຶ່ງພຣະຜູ້ເປັນເຈົ້າ ອົງເປັນພຣະເຈົ້າ ຂອງເຈົ້າປະທານໃຫ້.	Honor thy father and thy mother, that thy days may be long upon the land which the Lord thy God giveth thee.
๘๑	ເຈົ້າຈະບໍ່ ຂ້າກັນ.	Thou shalt not kill.
๘๘	ເຈົ້າຈະບໍ່ ຫລິ້ນຊູ້. ເຈົ້າຈະບໍ່ ລັກ.	Thou shalt not commit adultery. Thou shalt not steal.
๘๙	ເຈົ້າຈະບໍ່ເປັນ ພະຍານເທັດ ແລະ ທາຄວາມໃສ່ເພື່ອນບ້ານ ຂອງເຈົ້າ.	Thou shalt not bear false witness against thy neighbor.

๘๔ ເจົ້າຈະບໍ່ ລັກໂລບເອົາບ້ານເຮືອນຂອງເພື່ອນບ້ານຂອງເຈົ້າ, ເຈົ້າຈະບໍ່ລັກໂລບເອົາເມຍຂອງເພື່ອນບ້ານຂອງເຈົ້າ, ຫລື ຄົນໃຊ້ຜູ້ຊາຍຂອງເຂົາ, ຫລື ຄົນໃຊ້ຜູ້ຍິງຂອງເຂົາ, ຫລື ງົວຂອງເຂົາ, ຫລື ລໍຂອງເຂົາ, ຫລື ສິ່ງຂອງໃດໆທີ່ເປັນຂອງເພື່ອນບ້ານຂອງເຈົ້າ.

Thou shalt not covet thy neighbor's house, thou shalt not covet thy neighbor's wife, nor his man-servant, nor his maid-servant, nor his ox, nor his ass, nor anything that is thy neighbor's.

๘๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກອະບິນາໄດກ່າວ ຂໍ້ຄວາມເຫລົ່ານີ້ຈົບແລ້ວ ເພີ່ນກໍກ່າວກັບພວກເຂົາວ່າ: ພວກທ່ານໄດ້ສິດສອນຜູ້ຄົນພວກນີ້ໃຫ້ພວກເຂົາຍຶດຖື ແລະ ເຮັດຕາມສິ່ງເຫລົ່ານີ້ທັງໝົດ ເພື່ອຈະໄດ້ຮັກສາພຣະບັນຍັດເຫລົ່ານີ້ ຫລືບໍ່?

And it came to pass that after Abinadi had made an end of these sayings that he said unto them: Have ye taught this people that they should observe to do all these things for to keep these commandments?

๘๖ ຂ້າພະເຈົ້າກ່າວກັບພວກທ່ານວ່າ, ບໍ່ເລີຍ; ເພາະວ່າຖ້າຫາກ ພວກທ່ານສິດສອນ, ພຣະຜູ້ເປັນເຈົ້າຄົງບໍ່ໃຫ້ຂ້າພະເຈົ້າອອກ ມາ ແລະ ທຳນາຍເຖິງຄວາມຊົ່ວກ່ຽວກັບຜູ້ຄົນພວກນີ້ດອກ.

I say unto you, Nay; for if ye had, the Lord would not have caused me to come forth and to prophesy evil concerning this people.

๘๗ ແລະ ບັດນີ້ພວກທ່ານເວົ້າວ່າ ຄວາມລອດມາເຖິງโดยทางກົດຂອງໂມເຊ. ຂ້າພະເຈົ້າກ່າວກັບພວກທ່ານວ່າມັນເປັນການ ເໝາະສົມທີ່ພວກທ່ານຈະຮັກສາກົດຂອງໂມເຊໄວ້; ແຕ່ ຂ້າພະເຈົ້າກ່າວກັບພວກທ່ານວ່າ ເວລາຈະມາເຖິງເມື່ອມັນບໍ່ ສົມຄວນທີ່ຈະຮັກສາກົດຂອງໂມເຊ ອີກຕໍ່ໄປ.

And now ye have said that salvation cometh by the law of Moses. I say unto you that it is expedient that ye should keep the law of Moses as yet; but I say unto you, that the time shall come when it shall no more be expedient to keep the law of Moses.

๘๘ ແລະ ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າກ່າວກັບພວກທ່ານວ່າ, ຄວາມລອດບໍ່ໄດ້ມາເຖິງโดยทางກົດຂອງໂມເຊແຕ່ຝ່າຍດຽວ; ແລະ ຖ້າຫາກບໍ່ແມ່ນ ການຊົດໃຊ້ຊຶ່ງພຣະເຈົ້າພຣະອົງເອງຈະ ກະທຳໄປເພື່ອບາບ ແລະ ຄວາມຊົ່ວຮ້າຍຂອງມະນຸດຂອງ ພຣະອົງແລ້ວ, ພວກເຂົາກໍຕ້ອງຕາຍຢ່າງຫລີກລ້ຽງບໍ່ໄດ້, ທັງໆ ທີ່ກົດຂອງໂມເຊມີຢູ່.

And moreover, I say unto you, that salvation doth not come by the law alone; and were it not for the atonement, which God himself shall make for the sins and iniquities of his people, that they must unavoidably perish, notwithstanding the law of Moses.

๘๙ ແລະ ບັດນີ້ຂ້າພະເຈົ້າກ່າວກັບພວກທ່ານວ່າ ສົມຄວນແລ້ວ ທີ່ຈະມີກົດປະທານໃຫ້ລູກຫລານຂອງອິດສະຣາເອນ, ແທ້ຈິງ ແລ້ວ, ເປັນກົດທີ່ ເຄັ່ງຄັດທີ່ສຸດ; ເພາະພວກເຂົາເປັນຄົນແຂງຄໍ ແລະ ໄວທີ່ຈະເຮັດຄວາມຊົ່ວຮ້າຍ, ແລະ ຊັກຊ້າທີ່ຈະລະນຶກເຖິງ ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ;

And now I say unto you that it was expedient that there should be a law given to the children of Israel, yea, even a very strict law; for they were a stiffnecked people, quick to do iniquity, and slow to remember the Lord their God;

ມ໑໐ ສະນັ້ນ ຈຶ່ງມີ ກົດປະທານໃຫ້ພວກເຂົາ, ແທ້ຈິງແລ້ວ, ກົດ ການປະຕິບັດ ແລະ ພິທີການອັນເປັນກົດ ຊຶ່ງພວກເຂົາຕ້ອງ ຍຶດຖືຢ່າງເຄັ່ງຄັດທຸກມື້, ເພື່ອໃຫ້ພວກເຂົາລະນຶກເຖິງພຣະເຈົ້າ ແລະ ໜ້າທີ່ຂອງພວກເຂົາຕໍ່ພຣະອົງ.

Therefore there was a law given them, yea, a law of performances and of ordinances, a law which they were to observe strictly from day to day, to keep them in remembrance of God and their duty towards him.

ມ໑໑ ແຕ່ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານວ່າ, ທັງໝົດນີ້ ເປັນ ແບບໄວ້ສຳລັບສິ່ງທີ່ຈະມາເຖິງ.

But behold, I say unto you, that all these things were types of things to come.

ມ໑໘ ແລະ ບັດນີ້, ພວກເຂົາເຂົ້າໃຈກົດເຫລົ່ານີ້ແລ້ວບໍ? ຂ້າພະເຈົ້າ ກ່າວກັບພວກທ່ານວ່າ, ບໍ່ເລີຍ, ພວກເຂົາບໍ່ເຂົ້າໃຈກົດທຸກຄົນ; ແລະ ນີ້ເພາະຄວາມແຂງກະດ້າງຂອງໃຈຂອງພວກເຂົາ; ເພາະວ່າພວກເຂົາບໍ່ເຂົ້າໃຈວ່າ ບໍ່ມີຜູ້ໃດເລີຍຈະລອດໄດ້ ເວັ້ນ ເສຍແຕ່ໂດຍການໄຖ່ຂອງພຣະເຈົ້າເທົ່ານັ້ນ.

And now, did they understand the law? I say unto you, Nay, they did not all understand the law; and this because of the hardness of their hearts; for they understood not that there could not any man be saved except it were through the redemption of God.

ນ.ນ ເພາະຈົ່ງເບິ່ງ, ໂມເຊບໍ່ໄດ້ທຳນາຍແກ່ພວກເຂົາກ່ຽວກັບການສະເດັດມາຂອງພຣະເມຊີອາ, ແລະ ວ່າພຣະເຈົ້າຈະໄຖ່ຜູ້ຄົນຂອງພຣະອົງບໍ? ແທ້ຈິງແລ້ວ, ເຖິງແມ່ນສາດສະດາ ທັງປວງທີ່ທຳນາຍໄວ້ນັບແຕ່ການເລີ່ມຕົ້ນຂອງໂລກມາ—ພວກເພິ່ນກໍໄດ້ເວົ້າເຖິງເລື່ອງເຫລົ່ານີ້ ບໍ່ຫລາຍກໍໜ້ອຍແມ່ນບໍ?

For behold, did not Moses prophesy unto them concerning the coming of the Messiah, and that God should redeem his people? Yea, and even all the prophets who have prophesied ever since the world began—have they not spoken more or less concerning these things?

ນ.ສ ພວກເພິ່ນບໍ່ໄດ້ກ່າວໄວ້ບໍວ່າ ພຣະເຈົ້າພຣະອົງເອງຈະສະເດັດມາໃນບັນດາລູກຫລານມະນຸດ, ແລະ ຮັບເອົາຮູບລັກສະນະຂອງມະນຸດ, ແລະ ຈະສະເດັດໄປໂດຍອຳນາດອັນຍິ່ງໃຫຍ່ຕາມຜືນແຜ່ນດິນໂລກ?

Have they not said that God himself should come down among the children of men, and take upon him the form of man, and go forth in mighty power upon the face of the earth?

ນ.ຫ ແທ້ຈິງແລ້ວ, ພວກເພິ່ນບໍ່ໄດ້ກ່າວໄວ້ບໍວ່າ ພຣະອົງຈະເຮັດໃຫ້ເກີດ ການຟື້ນຄືນຊີວິດຂອງຄົນຕາຍ, ແລະ ວ່າພຣະອົງຈະຖືກຂົ່ມເຫັງ ແລະ ຈະເປັນທຸກ?

Yea, and have they not said also that he should bring to pass the resurrection of the dead, and that he, himself, should be oppressed and afflicted?

ໂມໄຊຢາ ๑๔

๑ ແທ້ຈິງແລ້ວ, ເອຊາຢາບໍ່ໄດ້ເວົ້າບໍ່ວ່າ: ແມ່ນໃຜຈະເຊື່ອໃນສິ່ງທີ່ ພວກເຮົາລາຍງານໄປ, ແລະ ພຣະຫັດຂອງພຣະຜູ້ເປັນເຈົ້າ ສະແດງຕໍ່ຜູ້ໃດ?

๒ ເພາະວ່າເພິ່ນຈະເຕີບໂຕໃຫຍ່ຂຶ້ນຕໍ່ໜ້າເພິ່ນຄືກັນກັບຕົ້ນໄມ້ ອ່ອນ, ແລະ ຮາກຈໍ່ອອກຈາກດິນແຫ້ງ; ເພິ່ນບໍ່ມີຮູບລັກສະນະ ແລະ ຄວາມງາມໃດໆ; ແລະ ເມື່ອພວກເຮົາເຫັນເພິ່ນວ່າ ບໍ່ມີ ຄວາມງາມເລີຍ ພວກເຮົາກໍບໍ່ປາດຖະໜາເພິ່ນ.

๓ ເພິ່ນຈະເປັນຜູ້ທີ່ຖືກໝິ່ນປະໝາດ ແລະ ຖືກຜູ້ຄົນ ປະຕິເສດ, ແລະ ເປັນຜູ້ມີຄວາມໂສກເສົ້າ ແລະ ສະຫລົດໃຈຄື ກັບວ່າ ພວກເຮົາໝົ້ໜ້າຈາກເພິ່ນ; ເພິ່ນຈະເປັນຄົນທີ່ຖືກໝິ່ນ ປະໝາດ, ແລະ ພວກເຮົາບໍ່ນັບຖືເພິ່ນ.

๔ ແນ່ນອນ ເພິ່ນຈະ ແບກຫາບເອົາ ຄວາມໂສກເສົ້າ, ແລະ ຄວາມເສົ້າສະຫລົດໃຈຂອງພວກເຮົາໄວ້; ແຕ່ປານນັ້ນ ພວກ ເຮົາຍັງຖືວ່າເພິ່ນຖືກຕີ, ຖືກລົງ�โทດຈາກພຣະເຈົ້າ, ແລະ ເປັນທຸກ.

๕ ແຕ່ວ່າເພິ່ນໄດ້ຮັບບາດເຈັບເພາະ ການລ່ວງລະເມີດຂອງ ພວກເຮົາ, ເພິ່ນມີຮອຍຟົກຊ້ຳເພາະຄວາມຊົ່ວຮ້າຍຂອງພວກ ເຮົາ; ການຕີສອນເພື່ອສັນຕິສຸກຂອງພວກເຮົາຢູ່ກັບເພິ່ນ; ແລະ ດ້ວຍຮອຍຖືກຕີຂອງເພິ່ນ ພວກເຮົາຈຶ່ງຖືກ ປິ່ນປົວໃຫ້ດີ.

๖ ພວກເຮົາທັງໝົດ, ເໝືອນດັ່ງ ໂຕແກະໄດ້ຫລົງທາງໄປ; ພວກເຮົາໄດ້ໄປຕາມເສັ້ນທາງຂອງໃຜລາວ; ແລະ ພຣະຜູ້ເປັນ ເຈົ້າໄດ້ວາງຄວາມຊົ່ວຮ້າຍທັງໝົດຂອງພວກເຮົາໄວ້ກັບ ພຣະອົງ.

๗ ເພິ່ນຈະຖືກຂົ່ມເຫັງ, ແລະ ເພິ່ນຈະທົນຕໍ່ຄວາມເປັນທຸກ, ແຕ່ ປານນັ້ນ ເພິ່ນຍັງບໍ່ເປີດປາກຂອງເພິ່ນເລີຍ; ເພິ່ນຖືກນຳເອົາໄປ ໂຮງຂ້າສັດຄືກັນກັບ ລູກແກະ, ແລະ ຄືກັບໂຕແກະທີ່ຢືນຢູ່ເສີຍໆ ຕໍ່ໜ້າຄົນທີ່ຕັດຂົນຂອງມັນ ແລະ ເພິ່ນກໍບໍ່ເປີດປາກເລີຍ.

๘ ເພິ່ນຖືກເອົາອອກຈາກຄຸກ ແລະ ຈາກການຕັດສິນ; ແລະ ແມ່ນໃຜຈະປະກາດຊົ່ວລຸ້ນຄົນຂອງເພິ່ນ? ເພາະວ່າເພິ່ນຖືກຕັດ ອອກຈາກແຜ່ນດິນຂອງຄົນມີຊີວິດຢູ່; ເພາະເພິ່ນຖືກຕີເພື່ອ ການລ່ວງລະເມີດຂອງຜູ້ຄົນຂອງເຮົາ.

๙ ແລະ ເພິ່ນຖືກຝັງໄວ້ນຳຄົນຊົ່ວ, ແລະ ນຳພວກ ເສດຖີ; ທັງໆ ທີ່ເພິ່ນບໍ່ໄດ້ເຮັດ ຄວາມຊົ່ວ ແລະ ບໍ່ມີຄວາມຫລອກລວງໃດໆ ຢູ່ໃນປາກຂອງເພິ່ນເລີຍ.

Mosiah 14

Yea, even doth not Isaiah say: Who hath believed our report, and to whom is the arm of the Lord revealed?

For he shall grow up before him as a tender plant, and as a root out of dry ground; he hath no form nor comeliness; and when we shall see him there is no beauty that we should desire him.

He is despised and rejected of men; a man of sorrows, and acquainted with grief; and we hid as it were our faces from him; he was despised, and we esteemed him not.

Surely he has borne our griefs, and carried our sorrows; yet we did esteem him stricken, smitten of God, and afflicted.

But he was wounded for our transgressions, he was bruised for our iniquities; the chastisement of our peace was upon him; and with his stripes we are healed.

All we, like sheep, have gone astray; we have turned every one to his own way; and the Lord hath laid on him the iniquities of us all.

He was oppressed, and he was afflicted, yet he opened not his mouth; he is brought as a lamb to the slaughter, and as a sheep before her shearers is dumb so he opened not his mouth.

He was taken from prison and from judgment; and who shall declare his generation? For he was cut off out of the land of the living; for the transgressions of my people was he stricken.

And he made his grave with the wicked, and with the rich in his death; because he had done no evil, neither was any deceit in his mouth.

ເຖິງຢ່າງໃດກໍຕາມ ພຣະຜູ້ເປັນເຈົ້າຍັງພໍພຣະໄທປ່ອຍໃຫ້ ເພີ່ນຟົກຊ້ຳ; ພຣະອົງໄດ້ເຮັດໃຫ້ເພີ່ນໂສກເສົ້າ; ເວລາພຣະອົງ ຈະເຮັດໃຫ້ຈິດວິນຍານຂອງເພີ່ນເປັນເຄື່ອງຖວາຍເພື່ອບາບ ເພີ່ນຈະເຫັນ ລູກຫລານຂອງເພີ່ນ, ພຣະອົງຈະໃຫ້ວັນເວລາ ຂອງເພີ່ນຍືດຍາວ, ແລະ ຄວາມພໍພຣະໄທຂອງພຣະຜູ້ເປັນເຈົ້າ ຈະຮຸ່ງເຮືອງໃນວັນຂອງເພີ່ນ.

ພຣະອົງຈະເບິ່ງຄວາມເຈັບປວດຂອງຈິດວິນຍານຂອງເພີ່ນ, ແລະ ຈະພໍພຣະໄທ; ໂດຍຄວາມຮູ້ຂອງເພີ່ນ ຜູ້ຮັບໃຊ້ທີ່ຊອບທຳ ຂອງເຮົາຈະຮັບຮອງຄົນຢ່າງຫລວງຫລາຍ; ເພາະເພີ່ນຈະ ແບກຄວາມຊົ່ວຮ້າຍຂອງຄົນເຫລົ່ານັ້ນ.

ສະນັ້ນ ເຮົາຈະແບ່ງສ່ວນໜຶ່ງໃຫ້ເພີ່ນກັບຄົນທີ່ຍິ່ງໃຫຍ່, ແລະ ເພີ່ນຈະແບ່ງຊັບທີ່ປຸ້ນກັບຄົນທີ່ແຂງແຮງ; ເພາະເພີ່ນເທ ຈິດວິນຍານຂອງເພີ່ນອອກຈົນເຖິງຄວາມຕາຍ; ແລະ ເພີ່ນຖືກ ນັບເຂົ້າຢູ່ກັບຄົນທີ່ລ່ວງລະເມີດ; ແລະ ເພີ່ນແບກບາບຂອງຄົນ ຢ່າງຫລວງຫລາຍໄວ້, ແລະ ວິງວອນແທນຄົນທີ່ລ່ວງລະເມີດ.

Yet it pleased the Lord to bruise him; he hath put him to grief; when thou shalt make his soul an offering for sin he shall see his seed, he shall prolong his days, and the pleasure of the Lord shall prosper in his hand.

He shall see the travail of his soul, and shall be satisfied; by his knowledge shall my righteous servant justify many; for he shall bear their iniquities.

Therefore will I divide him a portion with the great, and he shall divide the spoil with the strong; because he hath poured out his soul unto death; and he was numbered with the transgressors; and he bore the sins of many, and made intercession for the transgressors.

ໂມໄຊຢາ ๑๕

๑ ແລະ ບັດນີ້ອະບິນາໄດກ່າວກັບພວກເຂົາວ່າ: ຂ້າພະເຈົ້າຢາກໃຫ້ ພວກທ່ານເຂົ້າໃຈว່າ ພຣະເจ้าพระอ็ง เอง จะ สะเดัดมาหา ບັນດາລູກຫລານມະນຸດ ແລະ ຈະ ໄຖ່ຜູ້ຄົນຂອງພຣະອົງ.

๘ ແລະ ຍ້ອນว่าพระอ็งจะได้ ยู่ใน เนื้อหนัง พระอ็งจะถืก ເອີ້ນว่า ພຣະບຸດຂອງພຣະເจ้า, ແລະ ຂึ้นกับเนื้อหนัง ແລະ ตามพระปะสังของ ພຣະບິດາ, จึ่งเป็นทั้งพระบิดา ແລະ ພຣະບຸດ—

ແລະ ບັດນີ້, ດັ່ງເຊັ່ນທີ່ຂ້າພະເຈົ້າໄດ້ເວົ້າກັບທ່ານແລ້ວ, ຫລັງຈາກກະສັດໂມໄຊຢາກະທຳສິ່ງເຫລົ່ານີ້ແລ້ວ, ເພິ່ນໄດ້ເອົາ ແຜ່ນຈາລຶກ ທອງເຫລືອງ ແລະ ສິ່ງຂອງທັງໝົດຊຶ່ງເພິ່ນໄດ້ ເກັບກຳໄວ້ມາ, ແລ້ວມອບມັນໃຫ້ແອວມາ, ຜູ້ເປັນລູກຂອງແອວ ມາ; ແທ້ຈິງແລ້ວ, ບັນທຶກທັງໝົດ ແລະ ສິ່ງແປຄວາມໝາຍນຳ ອີກ, ແລະ ໄດ້ມອບສິ່ງທັງໝົດໃຫ້ລາວ, ແລະ ສັ່ງລາວວ່າ ລາວ ຄວນເກັບກຳ ແລະ ຮັກສາມັນໄວ້ໃຫ້ດີ, ແລະ ໃຫ້ເຮັດບັນທຶກ ກ່ຽວກັບຜູ້ຄົນໄວ້ນຳອີກ, ໂດຍມອບໃຫ້ຕໍ່ໆກັນໄປຈາກຄົນລຸ້ນ ໜຶ່ງຫາຄົນອີກລຸ້ນໜຶ່ງ, ດັ່ງເຊັ່ນທີ່ໄດ້ມອບຕໍ່ໆກັນມາຕັ້ງແຕ່ ເວລາທີ່ລີໄຮອອກຈາກເຢຣູຊາເລັມ.

Now after Mosiah had finished translating these records, behold, it gave an account of the people who were destroyed, from the time that they were destroyed back to the building of the great tower, at the time the Lord confounded the language of the people and they were scattered abroad upon the face of all the earth, yea, and even from that time back until the creation of Adam.

Now this account did cause the people of Mosiah to mourn exceedingly, yea, they were filled with sorrow; nevertheless it gave them much knowledge, in the which they did rejoice.

And this account shall be written hereafter; for behold, it is expedient that all people should know the things which are written in this account.

And now, as I said unto you, that after king Mosiah had done these things, he took the plates of brass, and all the things which he had kept, and conferred them upon Alma, who was the son of Alma; yea, all the records, and also the interpreters, and conferred them upon him, and commanded him that he should keep and preserve them, and also keep a record of the people, handing them down from one generation to another, even as they had been handed down from the time that Lehi left Jerusalem.

ໂມໄຊຢາ ๘๙

๑ ບັດນີ້ເມື່ອໂມໄຊຢາໄດ້ກະທຳສິ່ງເຫລົ່ານີ້ແລ້ວ ເພີ່ນໄດ້ສອບຖາມໄປທົ່ວແຜ່ນດິນໃນບັນດາຜູ້ຄົນທັງໝົດ, ໂດຍຢາກຮູ້ເຖິງເຈດຕະນາຂອງພວກເຂົາວ່າຜູ້ໃດຄວນເປັນກະສັດຂອງພວກເຂົາ.

๘ ແລະ ເຫດການໄດ້ບັງເກີດຂຶ້ນຄື ສຽງຂອງຜູ້ຄົນມີຄວາມວ່າ: ພວກຂ້ານ້ອຍຢາກໃຫ້ອາໂຣນ ລູກຊາຍຂອງທ່ານເອງມາເປັນກະສັດຂອງພວກຂ້ານ້ອຍ ແລະ ເປັນຜູ້ປົກຄອງຂອງພວກຂ້ານ້ອຍ.

๙ ບັດນີ້ອາໂຣນໄດ້ຂຶ້ນໄປຫາແຜ່ນດິນນີໄຟແລ້ວ, ສະນັ້ນ ກະສັດຈຶ່ງບໍ່ສາມາດມອບລາຊາອານາຈັກໃຫ້ລາວ; ທັງອາໂຣນເອງກໍບໍ່ຍອມຮັບເອົາລາຊາອານາຈັກ; ທັງບໍ່ມີ ລູກຊາຍຄົນໃດຂອງໂມໄຊຢາຍອມຮັບເອົາລາຊາອານາຈັກເລີຍ.

๑๐ ສະນັ້ນ ກະສັດໂມໄຊຢາຈຶ່ງໄດ້ສອບຖາມໄປໃນບັນດາຜູ້ຄົນອີກ; ແທ້ຈິງແລ້ວ, ເພີ່ນໄດ້ສົ່ງຂໍ້ຄວາມທີ່ຂຽນໄວ້ໄປເຖິງບັນດາຜູ້ຄົນ. ແລະ ນີ້ຄືຂໍ້ຄວາມທີ່ຂຽນໄວ້, ມີຄວາມວ່າ:

๑๑ ຈົ່ງເບິ່ງ, ໂອ້ ຜູ້ຄົນຂອງຂ້າພະເຈົ້າ, ຫລື ພີ່ນ້ອງຂອງຂ້າພະເຈົ້າ, ເພາະຂ້າພະເຈົ້າຖືວ່າພວກທ່ານເປັນດັ່ງນັ້ນ, ແລະ ຂ້າພະເຈົ້າປາດຖະໜາໃຫ້ພວກທ່ານພິຈາລະນາສາເຫດທີ່ພວກທ່ານຖືກຂໍໃຫ້ພິຈາລະນາ—ເພາະວ່າພວກທ່ານ ປາດຖະໜາຢາກມີ ກະສັດ.

๑๒ ບັດນີ້ຂ້າພະເຈົ້າປະກາດກັບພວກທ່ານວ່າ ຜູ້ທີ່ເປັນເຈົ້າຂອງ ລາຊາອານາຈັກນີ້ໂດຍສິດທິໄດ້ປະຕິເສດ, ແລະ ຈະບໍ່ຍອມຮັບ ເອົາລາຊາອານາຈັກ.

๑๓ ແລະ ບັດນີ້ຖ້າຫາກຈະແຕ່ງຕັ້ງຜູ້ອື່ນແທນ, ຈົ່ງເບິ່ງ, ຂ້າພະເຈົ້າຢ້ານວ່າ ມັນຈະເກີດການຜິດຖຽງກັນຂຶ້ນໃນບັນດາ ພວກທ່ານ. ແລະ ຜູ້ໃດຈະຮູ້ໄດ້ວ່າລູກຊາຍຂອງຂ້າພະເຈົ້າຜູ້ ເປັນເຈົ້າຂອງລາຊາອານາຈັກອາດຫັນມາຮ້າຍກາດຂຶ້ນ ແລະ ພາສ່ວນໜຶ່ງຂອງຜູ້ຄົນພວກນີ້ໄປກັບລາວ, ຊຶ່ງຈະເຮັດໃຫ້ເກີດ ສົງຄາມ ແລະ ການຂັດແຍ້ງກັນຂຶ້ນໃນບັນດາພວກທ່ານ, ຊຶ່ງຈະ ເປັນເຫດໃຫ້ມີການນອງເລືອດຢ່າງຫລວງຫລາຍເກີດຂຶ້ນ ແລະ ບິດເບືອນທາງຂອງພຣະຜູ້ເປັນເຈົ້າ, ແທ້ຈິງແລ້ວ, ແລະ ຈະ ທຳລາຍຈິດວິນຍານຂອງຜູ້ຄົນຢ່າງຫລວງຫລາຍ.

๑๔ ບັດນີ້ຂ້າພະເຈົ້າກ່າວກັບພວກທ່ານວ່າ ໃຫ້ພວກເຮົາ ສະຫລາດ ແລະ ພິຈາລະນາເລື່ອງເຫລົ່ານີ້, ເພາະວ່າພວກເຮົາ ບໍ່ມີສິດຈະທຳລາຍລູກຊາຍຂອງຂ້າພະເຈົ້າ, ທັງພວກເຮົາບໍ່ມີ ສິດໃດໆທີ່ຈະທຳລາຍຄົນອື່ນຖ້າຫາກແຕ່ງຕັ້ງຜູ້ນັ້ນຂຶ້ນມາ ແທນລາວ.

Mosiah 29

Now when Mosiah had done this he sent out throughout all the land, among all the people, desiring to know their will concerning who should be their king.

And it came to pass that the voice of the people came, saying: We are desirous that Aaron thy son should be our king and our ruler.

Now Aaron had gone up to the land of Nephi, therefore the king could not confer the kingdom upon him; neither would Aaron take upon him the kingdom; neither were any of the sons of Mosiah willing to take upon them the kingdom.

Therefore king Mosiah sent again among the people; yea, even a written word sent he among the people. And these were the words that were written, saying:

Behold, O ye my people, or my brethren, for I esteem you as such, I desire that ye should consider the cause which ye are called to consider—for ye are desirous to have a king.

Now I declare unto you that he to whom the kingdom doth rightly belong has declined, and will not take upon him the kingdom.

And now if there should be another appointed in his stead, behold I fear there would rise contentions among you. And who knoweth but what my son, to whom the kingdom doth belong, should turn to be angry and draw away a part of this people after him, which would cause wars and contentions among you, which would be the cause of shedding much blood and perverting the way of the Lord, yea, and destroy the souls of many people.

Now I say unto you let us be wise and consider these things, for we have no right to destroy my son, neither should we have any right to destroy another if he should be appointed in his stead.

ຈ ແລະ ຖ້າຫາກລູກຊາຍຂອງຂ້າພະເຈົ້າຫັນກັບໄປສູ່ຄວາມ ທະນົງໃຈເຖິງເລື່ອງທີ່ບໍ່ມີປະໂຫຍດຂອງລາວ, ລາວກໍຄົງຈະຈື່ ໄດ້ເຖິງຄຳເວົ້າຊຶ່ງລາວໄດ້ເວົ້າໄວ້ ແລະ ຈະຮຽກຮ້ອງເອົາສິດທິ ຂອງລາວໃນລາຊາອານາຈັກນີ້ຄືນໄປ, ຊຶ່ງຈະເຮັດໃຫ້ລາວ ແລະ ຜູ້ຄົນພວກນີ້ກະທຳບາບຫລາຍຂຶ້ນ.

And if my son should turn again to his pride and vain things he would recall the things which he had said, and claim his right to the kingdom, which would cause him and also this people to commit much sin.

ຊ ແລະ ບັດນີ້ໃຫ້ພວກເຮົາສະຫລາດ ແລະ ຊອກຫາສິ່ງເຫລົ່ານີ້, ແລະ ສິ່ງທີ່ຈະເຮັດໃຫ້ເກີດສັນຕິສຸກແກ່ຜູ້ຄົນພວກນີ້.

And now let us be wise and look forward to these things, and do that which will make for the peace of this people.

ຍ ສະນັ້ນ ຂ້າພະເຈົ້າຈະເປັນກະສັດຂອງພວກທ່ານໃນວັນເວລາ ທີ່ເຫລືອຢູ່ຂອງຂ້າພະເຈົ້າ; ເຖິງຢ່າງໃດກໍຕາມ, ໃຫ້ພວກເຮົາ ແຕ່ງຕັ້ງ ຜູ້ຕັດສິນເພື່ອຕັດສິນຜູ້ຄົນພວກນີ້ຕາມກົດຂອງພວກ ເຂົາ; ແລະ ພວກເຮົາຈະຈັດລະບຽບການງານໃໝ່ຂອງຜູ້ຄົນ ພວກນີ້, ເພາະວ່າພວກເຮົາຈະແຕ່ງຕັ້ງຜູ້ທີ່ມີສະຕິປັນຍາໃຫ້ ເປັນຜູ້ຕັດສິນ, ຊຶ່ງຈະຕັດສິນຜູ້ຄົນພວກນີ້ຕາມພຣະບັນຍັດ ຂອງພຣະເຈົ້າ.

Therefore I will be your king the remainder of my days; nevertheless, let us appoint judges, to judge this people according to our law; and we will newly arrange the affairs of this people, for we will appoint wise men to be judges, that will judge this people according to the commandments of God.

ດ ບັດນີ້ຖ້າຫາກມະນຸດຖືກພຣະເຈົ້າຕັດສິນຍັງຈະດີກວ່າທີ່ຈະ ໃຫ້ມະນຸດທຳມະດາຕັດສິນແມ່ນບໍ, ເພາະວ່າການພິພາກສາ ຂອງພຣະເຈົ້າທ່ຽງທຳສະເໝີໄປ, ແຕ່ການຕັດສິນຂອງມະນຸດ ນັ້ນບໍ່ທ່ຽງທຳສະເໝີໄປ.

Now it is better that a man should be judged of God than of man, for the judgments of God are always just, but the judgments of man are not always just.

ຕ ສະນັ້ນ, ຖ້າຫາກເປັນໄປວ່າ ພວກທ່ານຈະມີຄົນ ຊອບທຳ ມາເປັນກະສັດຂອງພວກທ່ານ ຊຶ່ງຈະສະຖາປະນາກົດຂອງ ພຣະເຈົ້າ ແລະ ຕັດສິນຜູ້ຄົນພວກນີ້ຕາມພຣະບັນຍັດຂອງ ພຣະອົງ, ແທ້ຈິງແລ້ວ, ຖ້າຫາກພວກທ່ານຈະມີຄົນມາເປັນ ກະສັດຂອງພວກທ່ານ ຜູ້ຈະເຮັດເພື່ອຜູ້ຄົນພວກນີ້ເໝືອນ ດັ່ງທີ່ ເບັນຢາມິນບິດາຂອງຂ້າພະເຈົ້າໄດ້ເຮັດມາ—ຂ້າພະເຈົ້າ ກ່າວກັບພວກທ່ານວ່າ, ຖ້າຫາກເລື່ອງມັນຈະເປັນໄປໄດ້ແບບນີ້ ສະເໝີໄປແລ້ວ ມັນກໍສົມຄວນທີ່ພວກທ່ານຈະມີກະສັດ ປົກຄອງພວກທ່ານຢູ່ສະເໝີ.

Therefore, if it were possible that you could have just men to be your kings, who would establish the laws of God, and judge this people according to his commandments, yea, if ye could have men for your kings who would do even as my father Benjamin did for this people—I say unto you, if this could always be the case then it would be expedient that ye should always have kings to rule over you.

ຖ ແລະ ແມ່ນແຕ່ຕົວຂ້າພະເຈົ້າເອງກໍຍັງໄດ້ທຳງານຈົນສຸດ ກຳລັງ ແລະ ສຸດຄວາມສາມາດຊຶ່ງຂ້າພະເຈົ້າມີຢູ່, ເພື່ອສິດສອນ ພຣະບັນຍັດຂອງພຣະເຈົ້າໃຫ້ແກ່ພວກທ່ານ, ແລະ ເພື່ອ ສະຖາປະນາສັນຕິສຸກຂຶ້ນທົ່ວແຜ່ນດິນ, ເພື່ອບໍ່ໃຫ້ມີສົງຄາມ ແລະ ການຂັດແຍ້ງກັນ, ບໍ່ໃຫ້ມີການຂີ້ລັກມັກສົກ, ຫລື ການ ປຸ້ນຈີ້, ຫລື ການຄາດຕະກຳ ຫລື ຄວາມຊົ່ວຮ້າຍນາໆປະການ;

And even I myself have labored with all the power and faculties which I have possessed, to teach you the commandments of God, and to establish peace throughout the land, that there should be no wars nor contentions, no stealing, nor plundering, nor murdering, nor any manner of iniquity;

ທ ແລະ ຜູ້ໃດກໍຕາມທີ່ເຮັດຄວາມຊົ່ວຮ້າຍນີ້, ຂ້າພະເຈົ້າກໍຈະໄດ້ ລົງໂທດເຂົາຕາມກົດ ຊຶ່ງບັນພະບຸລຸດຂອງພວກເຮົາໄດ້ ມອບໃຫ້ພວກເຮົາ.

And whosoever has committed iniquity, him have I punished according to the crime which he has committed, according to the law which has been given to us by our fathers.

ນ ບັດນີ້ຂ້າພະເຈົ້າກ່າວກັບພວກທ່ານວ່າ ເພາະວ່າມະນຸດບໍ່ມີ ຄວາມທ່ຽງທຳທຸກຄົນ ຈຶ່ງບໍ່ສົມຄວນທີ່ພວກທ່ານຈະມີກະສັດ ຄົນໜຶ່ງ ຫລື ກະສັດຫລາຍຄົນປົກຄອງພວກທ່ານ.

Now I say unto you, that because all men are not just it is not expedient that ye should have a king or kings to rule over you.

ເພາະຈົ່ງເບິ່ງ, ກະສັດ ຊົ່ວຄົນໜຶ່ງເຮັດໃຫ້ ຄວາມຊົ່ວຮ້າຍ ເກີດຂຶ້ນໄດ້ຫລາຍປານໃດ, ແທ້ຈິງແລ້ວ, ເປັນຄວາມພິນາດອັນ ໃຫຍ່ຫລວງພຽງໃດ!

ແທ້ຈິງແລ້ວ, ໃຫ້ສຳນຶກເຖິງກະສັດโนอา, ຄວາມຊົ່ວຮ້າຍ ຂອງເພີ່ນ ແລະ ຄວາມໜ້າກຽດຊັງຂອງເພີ່ນ, ແລະ ຄວາມ ຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງຜູ້ຄົນຂອງເພີ່ນນຳອີກ. ຈົ່ງເບິ່ງ ຄວາມພິນາດອັນໃຫຍ່ຫລວງໄດ້ເກີດກັບພວກເຂົາ ແລ້ວ; ແລະ ເພາະຄວາມຊົ່ວຮ້າຍຂອງພວກເຂົາ, ພວກເຂົາຈຶ່ງ ໄດ້ຖືກເອົາໄປເປັນ ທາດ.

ແລະ ຖ້າຫາກບໍ່ມີການຫຍຸ້ງກ່ຽວຂອງພຣະຜູ້ສ້າງຜູ້ມີສະຕິ ປັນຍາຂອງພວກເຂົາແລ້ວ, ແລະ ຖ້າບໍ່ແມ່ນຍ້ອນການກັບໃຈ ຢ່າງແທ້ຈິງຂອງພວກເຂົາແລ້ວ, ພວກເຂົາຈະຕ້ອງຢູ່ໃນຄວາມ ເປັນທາດຈົນເຖິງບັດນີ້ຢ່າງບໍ່ມີທາງຫລີກລ້ຽງໄດ້.

ແຕ່ຈົ່ງເບິ່ງ, ພຣະອົງໄດ້ປົດປ່ອຍພວກເຂົາ ເພາະວ່າພວກ ເຂົາໄດ້ ຖ່ອມຕົວຕໍ່ພຣະພັກຂອງພຣະອົງ; ແລະ ເພາະວ່າພວກ ເຂົາ ທູນຂໍຢ່າງສຸດກຳລັງຕໍ່ພຣະອົງ, ພຣະອົງຈຶ່ງໄດ້ປົດປ່ອຍ ພວກເຂົາອອກຈາກຄວາມເປັນທາດ; ແລະ ເພາະສະນັ້ນ ພຣະ ຜູ້ເປັນເຈົ້າຈຶ່ງກະທຳດ້ວຍອຳນາດຂອງພຣະອົງໃນທຸກກໍລະນີ ໃນບັນດາລູກຫລານມະນຸດ, ໂດຍເດ່ພຣະຫັດແຫ່ງ ຄວາມ ເມດຕາມາຍັງຜູ້ທີ່ ໄວ້ວາງใจໃນພຣະອົງ.

ແລະ ຈົ່ງເບິ່ງ, ບັດນີ້ຂ້າພະເຈົ້າກ່າວກັບພວກທ່ານວ່າ, ພວກ ທ່ານຈະກຳຈັດກະສັດຊົ່ວຮ້າຍຜູ້ໜຶ່ງອອກຈາກບັນລັງບໍ່ໄດ້ ນອກຈາກຈະເປັນການຂັດແຍ້ງຢ່າງໜັກ ແລະ ການນອງເລືອດ ຢ່າງຫລວງຫລາຍ.

ເພາະຈົ່ງເບິ່ງ, ໃນຄວາມຊົ່ວຮ້າຍກະສັດກໍຍັງມີ ໝູ່ເພື່ອນ, ແລະ ເພີ່ນຈະຈັດເສນາອານາດໄວ້ອ້ອມຮອບເພີ່ນ; ແລະ ເພີ່ນ ຈະທຳລາຍກົດຂອງຄົນທີ່ປົກຄອງມາໃນຄວາມຊອບທຳກ່ອນ ເພີ່ນ; ແລະ ເພີ່ນຈະຢຽບຍ່ຳພຣະບັນຍັດຂອງພຣະເຈົ້າໄວ້ໃຕ້ ຕີນຂອງເພີ່ນ;

ແລະ ເພີ່ນຈະອອກກົດໃໝ່ ແລະ ສົ່ງອອກໄປໃນບັນດາຜູ້ຄົນ ຂອງເພີ່ນ, ແທ້ຈິງແລ້ວ, ແມ່ນແຕ່ກົດຕາມວິທີການແຫ່ງ ຄວາມຊົ່ວຮ້າຍຂອງເພີ່ນເອງ; ແລະ ຜູ້ໃດກໍຕາມທີ່ບໍ່ເຮັດຕາມ ກົດຂອງເພີ່ນ, ເພີ່ນກໍຈະທຳລາຍຜູ້ນັ້ນເສຍ; ແລະ ຜູ້ໃດກໍຕາມ ທີ່ກະບົດຕໍ່ເພີ່ນ, ເພີ່ນກໍຈະສົ່ງກອງທັບໄປປາບຜູ້ນັ້ນ; ແລະ ຖ້າຫາກເພີ່ນເຮັດໄດ້, ເພີ່ນຈະທຳລາຍເຂົາເສຍ, ແລະ ດັ່ງນັ້ນ ກະສັດທີ່ບໍ່ຊອບທຳຈຶ່ງບິດເບືອນທາງແຫ່ງຄວາມຊອບທຳ ທັງໝົດ.

ແລະ ບັດນີ້ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບພວກທ່ານວ່າ, ບໍ່ ສົມຄວນເລີຍທີ່ຄວາມໜ້າກຽດຊັງເຊັ່ນນັ້ນຈະເກີດກັບພວກ ທ່ານ.

For behold, how much iniquity doth one wicked king cause to be committed, yea, and what great destruction!

Yea, remember king Noah, his wickedness and his abominations, and also the wickedness and abominations of his people. Behold what great destruction did come upon them; and also because of their iniquities they were brought into bondage.

And were it not for the interposition of their all-wise Creator, and this because of their sincere repentance, they must unavoidably remain in bondage until now.

But behold, he did deliver them because they did humble themselves before him; and because they cried mightily unto him he did deliver them out of bondage; and thus doth the Lord work with his power in all cases among the children of men, extending the arm of mercy towards them that put their trust in him.

And behold, now I say unto you, ye cannot dethrone an iniquitous king save it be through much contention, and the shedding of much blood.

For behold, he has his friends in iniquity, and he keepeth his guards about him; and he teareth up the laws of those who have reigned in righteousness before him; and he trampleth under his feet the commandments of God;

And he enacteth laws, and sendeth them forth among his people, yea, laws after the manner of his own wickedness; and whosoever doth not obey his laws he causeth to be destroyed; and whosoever doth rebel against him he will send his armies against them to war, and if he can he will destroy them; and thus an unrighteous king doth pervert the ways of all righteousness.

And now behold I say unto you, it is not expedient that such abominations should come upon you.

Therefore, choose you by the voice of this people, judges, that ye may be judged according to the laws which have been given you by our fathers, which are correct, and which were given them by the hand of the Lord.

Now it is not common that the voice of the people desireth anything contrary to that which is right; but it is common for the lesser part of the people to desire that which is not right; therefore this shall ye observe and make it your law—to do your business by the voice of the people.

And if the time comes that the voice of the people doth choose iniquity, then is the time that the judgments of God will come upon you; yea, then is the time he will visit you with great destruction even as he has hitherto visited this land.

And now if ye have judges, and they do not judge you according to the law which has been given, ye can cause that they may be judged of a higher judge.

If your higher judges do not judge righteous judgments, ye shall cause that a small number of your lower judges should be gathered together, and they shall judge your higher judges, according to the voice of the people.

And I command you to do these things in the fear of the Lord; and I command you to do these things, and that ye have no king; that if these people commit sins and iniquities they shall be answered upon their own heads.

For behold I say unto you, the sins of many people have been caused by the iniquities of their kings; therefore their iniquities are answered upon the heads of their kings.

ສະນັ້ນ, ພວກທ່ານຈົ່ງເລືອກເອົາຜູ້ຕັດສິນໂດຍສຽງຂອງ
ຜູ້ຄົນພວກນີ້ ເພື່ອພວກທ່ານຈະໄດ້ຮັບການຕັດສິນຕາມກົດຊຶ່ງ
ບັນພະບຸລຸດຂອງພວກເຮົາໄດ້ໃຫ້ໄວ້ກັບພວກທ່ານ ຊຶ່ງ
ຖືກຕ້ອງ, ແລະ ຊຶ່ງໄດ້ໃຫ້ໄວ້ກັບພວກທ່ານໂດຍພຣະຫັດຂອງ
ພຣະຜູ້ເປັນເຈົ້າ.

ບັດນີ້ບໍ່ແມ່ນເລື່ອງທຳມະດາທີ່ສຽງຜູ້ຄົນຈະປາດຖະໜາສິ່ງ
ກົງກັນຂ້າມກັບສິ່ງທີ່ຖືກຕ້ອງ, ແຕ່ເປັນເລື່ອງທຳມະດາສຳລັບ
ຄົນສ່ວນໜ້ອຍທີ່ປາດຖະໜາສິ່ງທີ່ບໍ່ຖືກຕ້ອງ; ສະນັ້ນ ເລື່ອງນີ້
ພວກທ່ານຈົ່ງຍຶດຖື ແລະ ເຮັດໃຫ້ເປັນກົດຂອງພວກທ່ານ—ທີ່
ຈະຈັດທຸລະກິດຂອງພວກທ່ານໂດຍສຽງຂອງຜູ້ຄົນ.

ແລະ ຖ້າຫາກເວລາມາເຖິງ ເມື່ອສຽງຂອງຜູ້ຄົນເລືອກເອົາ
ຄວາມຊົ່ວຮ້າຍ, ເມື່ອນນັ້ນກໍເປັນເວລາທີ່ການພິພາກສາຂອງ
ພຣະເຈົ້າຈະເກີດກັບພວກທ່ານ; ແທ້ຈິງແລ້ວ, ເມື່ອນັ້ນ ຈະເປັນ
ເວລາທີ່ພຣະອົງຈະສະເດັດມາຢ້ຽມຢາມພວກທ່ານດ້ວຍຄວາມ
ພິນາດອັນແສນສາຫັດດັ່ງທີ່ພຣະອົງເຄີຍສະເດັດມາຢ້ຽມຢາມ
ແຜ່ນດິນນີ້.

ແລະ ບັດນີ້ຖ້າຫາກພວກທ່ານມີຜູ້ຕັດສິນ, ແລະ ພວກເພີ່ນ
ບໍ່ຕັດສິນພວກທ່ານຕາມກົດຊຶ່ງມີໄວ້ໃຫ້ແລ້ວ, ພວກທ່ານກໍ
ອາດຈະໃຫ້ພວກເພີ່ນໄດ້ຮັບການຕັດສິນຈາກສານທີ່ສູງກວ່າ
ນັ້ນ.

ແລະ ຖ້າຫາກຜູ້ຕັດສິນຂອງພວກທ່ານທີ່ສູງກວ່າບໍ່ໃຫ້ການ
ຕັດສິນທີ່ຖືກຕ້ອງ, ແລ້ວພວກທ່ານຄວນຈະຫາຜູ້ຕັດສິນ
ຫລາຍຄົນທີ່ຕ່ຳກວ່າຂອງພວກທ່ານມາເຕົ້າໂຮມກັນ, ແລະ
ພວກເພີ່ນຈະຕັດສິນຜູ້ຕັດສິນທີ່ສູງກວ່າຂອງພວກທ່ານຕາມ
ສຽງຂອງປະຊາຊົນ.

ແລະ ເຮົາສັ່ງໃຫ້ພວກທ່ານເຮັດແນວນີ້ດ້ວຍຄວາມຢ້ານກົວ
ພຣະຜູ້ເປັນເຈົ້າ; ແລະ ເຮົາສັ່ງໃຫ້ພວກທ່ານເຮັດສິ່ງເຫລົ່ານີ້,
ແລະ ບໍ່ໃຫ້ມີກະສັດ; ຄືຖ້າຫາກຄົນພວກນີ້ເຮັດບາບ ແລະ
ຄວາມຊົ່ວຮ້າຍ ແລ້ວພວກເຂົາຈະໄດ້ຮັບຄຳຕອບໄວ້ເທິງຫົວ
ຂອງພວກເຂົາເອງ.

ເພາະຈົ່ງເບິ່ງ ເຮົາກ່າວກັບພວກທ່ານວ່າ, ບາບຂອງຄົນຢ່າງ
ຫລວງຫລາຍເກີດຂຶ້ນຍ້ອນຄວາມຊົ່ວຮ້າຍຂອງກະສັດຂອງ
ພວກເຂົາ; ສະນັ້ນ ຄວາມຊົ່ວຮ້າຍຂອງພວກເຂົາຍ່ອມໄດ້ຮັບຄຳ
ຕອບໄວ້ເທິງຫົວຂອງກະສັດຂອງພວກເຂົາ.

ມ.ດ ແລະ ບັດນີ້ເຮົາປາດຖະໜາວ່າ ຄວາມບໍ່ສະເໝີພາບຈະບໍ່ມີອີກຕໍ່ໄປໃນແຜ່ນດິນນີ້, ໂດຍສະເພາະ ໃນບັນດາຜູ້ຄົນຂອງຂ້າພະເຈົ້າເອງ; ແຕ່ຂ້າພະເຈົ້າປາດຖະໜາໃຫ້ແຜ່ນດິນນີ້ເປັນແຜ່ນດິນ ແຫ່ງເສລີພາບ, ແລະ ທຸກໆຄົນຈະຊື່ນຊົມໃນສິດ ແລະ ສິດທິພິເສດເທົ່າທຽມກັນຕາບໃດທີ່ພຣະຜູ້ເປັນເຈົ້າເຫັນສົມຄວນທີ່ພວກເຮົາຈະດຳລົງຊີວິດຢູ່ ແລະ ຮັບແຜ່ນດິນເປັນມູນມໍລະດົກ, ແທ້ຈິງແລ້ວ, ຕາບໃດທີ່ລູກຫລານຄົນໃດຂອງພວກເຮົາຍັງເຫລືອຢູ່ໃນແຜ່ນດິນນີ້.

And now I desire that this inequality should be no more in this land, especially among this my people; but I desire that this land be a land of liberty, and every man may enjoy his rights and privileges alike, so long as the Lord sees fit that we may live and inherit the land, yea, even as long as any of our posterity remains upon the face of the land.

ມ.ມ ແລະ ກະສັດໂມໄຊຢາໄດ້ຂຽນອີກຫລາຍເລື່ອງໄປເຖິງພວກເຂົາ, ໂດຍໄດ້ເປີດເຜີຍໃຫ້ຮູ້ເຖິງຄວາມເດືອດຮ້ອນ ແລະ ຄວາມຫຍຸ້ງຍາກຂອງກະສັດທີ່ຊອບທຳ, ແທ້ຈິງແລ້ວ, ຄວາມເຈັບປວດຂອງຈິດວິນຍານເພື່ອຜູ້ຄົນຂອງຕົນນັ້ນ, ແລະ ການຈົ່ມວ່າທັງໝົດຂອງຜູ້ຄົນທີ່ມີຕໍ່ກະສັດຂອງພວກເຂົານຳອີກ; ແລະ ເພີ່ນໄດ້ອະທິບາຍເລື່ອງທັງໝົດນີ້ໃຫ້ພວກເຂົາຟັງ.

And many more things did king Mosiah write unto them, unfolding unto them all the trials and troubles of a righteous king, yea, all the travails of soul for their people, and also all the murmurings of the people to their king; and he explained it all unto them.

ມ.ຫ ແລະ ເພີ່ນໄດ້ບອກພວກເຂົາວ່າ ເລື່ອງເຫລົ່ານີ້ບໍ່ຄວນຈະເກີດຂຶ້ນ; ແຕ່ວ່າພາລະແບກຫາບຄວນຈະເກີດຂຶ້ນກັບທຸກຄົນ ເພື່ອມະນຸດທຸກໆຄົນຈະໄດ້ຮັບສ່ວນແບ່ງຂອງຕົນ.

And he told them that these things ought not to be; but that the burden should come upon all the people, that every man might bear his part.

ມ.ຫ ແລະ ເພີ່ນໄດ້ເປີດເຜີຍໃຫ້ພວກເຂົາຮູ້ຈັກການເສຍປຽບທັງໝົດຂອງວຽກງານທີ່ພວກເຂົາເຮັດໄປນັ້ນນຳອີກ, ໂດຍມີກະສັດທີ່ບໍ່ຊອບທຳປົກຄອງພວກເຂົາ;

And he also unfolded unto them all the disadvantages they labored under, by having an unrighteous king to rule over them;

ມ.ຍ ແທ້ຈິງແລ້ວ, ຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງທັງໝົດຂອງເພີ່ນ, ແລະ ສົງຄາມທັງໝົດ, ແລະ ການຂັດແຍ້ງ, ແລະ ການນອງເລືອດ, ແລະ ການລັກ, ແລະ ການປຸ້ນຈີ້, ແລະ ການທຳການໂສເພນີ, ແລະ ຄວາມຊົ່ວຮ້າຍນາໆປະການ ຊຶ່ງບໍ່ສາມາດຍົກຂຶ້ນມາເວົ້າໃຫ້ໝົດໄດ້—ບອກພວກເຂົາວ່າສິ່ງເຫລົ່ານີ້ບໍ່ຄວນຈະມີຂຶ້ນເລີຍ, ເພາະມັນກົງກັນຂ້າມຢ່າງເຫັນໄດ້ຢ່າງແຈ້ງຊັດກັບພຣະບັນຍັດຂອງພຣະເຈົ້າ.

And he also unfolded unto them all the disadvantages they labored under, by having an unrighteous king to rule over them;

Yea, all his iniquities and abominations, and all the wars, and contentions, and bloodshed, and the stealing, and the plundering, and the committing of whoredoms, and all manner of iniquities which cannot be enumerated—telling them that these things ought not to be, that they were expressly repugnant to the commandments of God.

ມ.ສ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື, ຫລັງຈາກໂມໄຊຢາໄດ້ສົ່ງເລື່ອງເຫລົ່ານີ້ອອກໄປຫາບັນດາຜູ້ຄົນແລ້ວ ຄົນທັງຫລາຍຈຶ່ງແນ່ໃຈເຖິງຄວາມຈິງຈາກຄຳເວົ້າຂອງເພີ່ນ.

And now it came to pass, after king Mosiah had sent these things forth among the people they were convinced of the truth of his words.

ມ.ຊ ສະນັ້ນ ພວກເຂົາຈຶ່ງເລີກລົ້ມຄວາມປາດຖະໜາທີ່ຈະມີກະສັດ, ແລະ ກັບມາກະຕືລືລົ້ນຢ່າງຍິ່ງທີ່ຈະໃຫ້ທຸກຄົນມີໂອກາດເທົ່າທຽມກັນຕະຫລອດທົ່ວແຜ່ນດິນ; ແທ້ຈິງແລ້ວ, ແລະ ທຸກຄົນສະແດງຄວາມເຕັມໃຈທີ່ຈະຮັບເອົາບາບຂອງຕົນເອງ.

Therefore they relinquished their desires for a king, and became exceedingly anxious that every man should have an equal chance throughout all the land; yea, and every man expressed a willingness to answer for his own sins.

ມ.ດ ສະນັ້ນ, ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນເຫລົ່ານັ້ນໄດ້ມາເຕົ້າໂຮມກັນເປັນກຸ່ມໆຕະຫລອດທົ່ວແຜ່ນດິນ, ເພື່ອອອກສຽງຂອງຕົນເອງກ່ຽວກັບວ່າ ຜູ້ໃດຄວນເປັນຜູ້ຕັດສິນຂອງພວກເຂົາທີ່ຈະຕັດສິນຕາມ ກົດຊຶ່ງມີໃຫ້ໄວ້ກັບພວກເຂົາ; ແລະ ພວກເຂົາມີຄວາມປິຕິຍິນດີຢ່າງຍິ່ງໃນ ເສລີພາບທີ່ພວກເຂົາໄດ້ຮັບມາ.

Therefore, it came to pass that they assembled themselves together in bodies throughout the land, to cast in their voices concerning who should be their judges, to judge them according to the law which had been given them; and they were exceedingly rejoiced because of the liberty which had been granted unto them.

๔๐ ແລະ ພວກເຂົາມີຄວາມຮັກແພງຫລາຍຂຶ້ນຕໍ່ໂມໄຊຢາ; ແທ້ຈິງແລ້ວ, ພວກເຂົານັບຖືເພີ່ນຫລາຍກວ່າຄົນອື່ນໆ; ເພາະພວກເຂົາເຫັນວ່າເພີ່ນບໍ່ເປັນຄົນກົດຂີ່ຂົ່ມເຫັງ ຊຶ່ງສະແຫວງຫາຜົນປະ�โຫຍດສ່ວນຕົວ, ແທ້ຈິງແລ້ວ, ສະແຫວງຫາຊັບສິນ ຊຶ່ງເຮັດໃຫ້ຈິດວິນຍານເສື່ອມโຊມ; ເພາະເພີ່ນບໍ່ໄດ້ຮຽກຮ້ອງເອົາຂອງມີຄ່າຈາກພວກເຂົາເລີຍ, ທັງບໍ່ໄດ້ເບີກບານໃນການນອງເລືອດ; ແຕ່ເພີ່ນໄດ້ສະຖາປະນາ ສັນຕິສຸກຂຶ້ນໃນແຜ່ນດິນ, ແລະ ເພີ່ນໄດ້ໃຫ້ຜູ້ຄົນຂອງເພີ່ນໄດ້ຮັບການປົດປ່ອຍຈາກຄວາມເປັນທາດທຸກຢ່າງ; ສະນັ້ນ ພວກເຂົາຈຶ່ງນັບຖືເພີ່ນຢ່າງລົ້ນເຫລືອ, ແທ້ຈິງແລ້ວ, ເກີນກວ່າທີ່ຈະວັດແທກໄດ້.

And they did wax strong in love towards Mosiah; yea, they did esteem him more than any other man; for they did not look upon him as a tyrant who was seeking for gain, yea, for that lucre which doth corrupt the soul; for he had not exacted riches of them, neither had he delighted in the shedding of blood; but he had established peace in the land, and he had granted unto his people that they should be delivered from all manner of bondage; therefore they did esteem him, yea, exceedingly, beyond measure.

๔๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ແຕ່ງຕັ້ງ ຜູ້ຕັດສິນເພື່ອປົກຄອງພວກເຂົາ, ຫລື ວ່າຜູ້ຕັດສິນພວກເຂົາຕາມກົດ; ແລະ ສິ່ງນີ້ພວກເຂົາໄດ້ເຮັດຕະຫລອດທົ່ວແຜ່ນດິນ.

And it came to pass that they did appoint judges to rule over them, or to judge them according to the law; and this they did throughout all the land.

๔๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ແອອມາໄດ້ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າຜູ້ຕັດສິນຄົນທຳອິດ, ເພີ່ນໄດ້ເປັນມະຫາປະ�โລຫິດນຳອີກ, ບິດາຂອງເພີ່ນໄດ້ມອບຕຳແໜ່ງໃຫ້ເພີ່ນ ແລະ ມອບໜ້າທີ່ຮັບຜິດຊອບກ່ຽວກັບ ການງານທັງໝົດຂອງສາດສະໜາຈັກໃຫ້ເພີ່ນ.

And it came to pass that Alma was appointed to be the first chief judge, he being also the high priest, his father having conferred the office upon him, and having given him the charge concerning all the affairs of the church.

๔๓ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ແອອມາໄດ້ ເດີນໃນທາງຂອງພຣະຜູ້ເປັນເจົ້າ, ແລະ ເພີ່ນໄດ້ຮັກສາພຣະບັນຍັດຂອງພຣະອົງ, ແລະ ເພີ່ນໄດ້ຕັດສິນດ້ວຍການຕັດສິນອັນຖືກຕ້ອງ; ແລະ ມັນມີສັນຕິສຸກຕິດຕໍ່ກັນທົ່ວແຜ່ນດິນ.

And now it came to pass that Alma did walk in the ways of the Lord, and he did keep his commandments, and he did judge righteous judgments; and there was continual peace through the land.

๔๔ ແລະ ສະນັ້ນການປົກຄອງຂອງຜູ້ຕັດສິນຕະຫລອດທົ່ວແຜ່ນດິນເຊຣາເຮັມລາຈຶ່ງເລີ່ມມີຂຶ້ນໃນບັນດາຜູ້ຄົນທັງໝົດທີ່ມີຊື່ວ່າ ຊາວນີໄຟ; ແລະ ແອອມາເປັນຜູ້ຕັດສິນຄົນທຳອິດ ແລະ ເປັນຫົວໜ້າ.

And thus commenced the reign of the judges throughout all the land of Zarahemla, among all the people who were called the Nephites; and Alma was the first and chief judge.

๔๕ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ບິດາຂອງເພີ່ນໄດ້ສິ້ນຊີວິດເມື່ອມີອາຍຸໄດ້ແປດສິບສອງປີ, ໂດຍມີຊີວິດເພື່ອເຮັດໃຫ້ພຣະບັນຍັດຂອງພຣະເจົ້າບັນລຸຜົນສຳເລັດ.

And now it came to pass that his father died, being eighty and two years old, having lived to fulfil the commandments of God.

๔๖ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໄຊຢາກໍໄດ້ສິ້ນຊີວິດໄປຄືກັນໃນປີທີສາມສິບສາມແຫ່ງການປົກຄອງຂອງເພີ່ນ, ຊຶ່ງມີອາຍຸໄດ້ ຫົກສິບສາມປີ; ນັບເປັນເວລາທັງໝົດຫ້າຮ້ອຍເກົ້າປີ ນັບຕັ້ງແຕ່ເວລາທີ່ລີໄຮອອກຈາກເຢຣູຊາເລັມມາ.

And it came to pass that Mosiah died also, in the thirty and third year of his reign, being sixty and three years old; making in the whole, five hundred and nine years from the time Lehi left Jerusalem.

๔๗ ແລະ ດັ່ງນັ້ນການປົກຄອງຂອງກະສັດເພື່ອດູແລຜູ້ຄົນຂອງນີໄຟຈຶ່ງໝົດໄປ; ແລະ ດັ່ງນັ້ນວັນເວລາຂອງແອອມາຜູ້ສ້າງຕັ້ງຮາກຖານຂອງສາດສະໜາຈັກກໍໝົດໄປເຊັ່ນດຽວກັນ.

And thus ended the reign of the kings over the people of Nephi; and thus ended the days of Alma, who was the founder of their church.

ໜັງສືແອວມາ

ລູກຊາຍຂອງແອວມາ

ເລື່ອງລາວຂອງແອວມາ, ຜູ້ເປັນລູກຊາຍຂອງແອວມາ, ຜູ້ເປັນຫົວໜ້າຜູ້ຕັດສິນຄົນທຳອິດຂອງຜູ້ຄົນຂອງນີໄຟ, ແລະ ທັງເປັນມະຫາປະໂລຫິດດູແລສາດສະໜາจักນຳອີກ. ເລື່ອງລາວກ່ຽວກັບການປົກຄອງຂອງຜູ້ຕັດສິນ, ແລະ ສົງຄາມ ແລະ ການຂັດແຍ້ງໃນບັນດາຜູ້ຄົນ. ແລະ ເລື່ອງລາວຕ່າງໆກ່ຽວກັບສົງຄາມລະຫວ່າງຊາວນີໄຟກັບຊາວເລມັນນຳອີກ, ຊຶ່ງເປັນໄປຕາມບັນທຶກຂອງແອວມາ, ຜູ້ເປັນຫົວໜ້າຜູ້ຕັດສິນຄົນທຳອິດ.

ແອວມາ ໑

ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ໃນປີທຳອິດແຫ່ງການປົກຄອງ ๑ ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ, ນັບຈາກເວລານີ້ໄປກະສັດ ໂມໄຊຢາໄດ້ ຈາກໄປຕາມທາງຂອງໂລກແລ້ວ, ຊຶ່ງເພີ່ນໄດ້ຕໍ່ສູ້ ມາຢ່າງອົດທົນ, ເດີນໄປຢ່າງພາກພູມໃຈຕໍ່ພຣະພັກຂອງ ພຣະເจ้า, ບໍ່ມີຜູ້ໃດຈະຂຶ້ນປົກຄອງແທນເພີ່ນເລີຍ; ເຖິງຢ່າງໃດ ກໍຕາມ ເພີ່ນຍັງໄດ້ສະຖາປະນາ ກົດຂຶ້ນ ແລະ ຜູ້ຄົນກໍຍອມຮັບ ເອົາກົດເຫລົ່ານັ້ນ; ສະນັ້ນ ພວກເຂົາຈຶ່ງຕ້ອງປະຕິບັດຕາມກົດ ຊຶ່ງເພີ່ນໄດ້ຕັ້ງໄວ້ໃຫ້.

ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີທຳອິດຂອງການ ๒ ປົກຄອງຂອງແອວມາໃນບັນລັງຕັດສິນນັ້ນ, ມີຄົນຜູ້ໜຶ່ງຖືກນຳ ເອົາມາຢູ່ຕໍ່ໜ້າເພີ່ນເພື່ອຮັບການຕັດສິນ, ຊາຍຄົນນີ້ເປັນຄົນທີ່ ມີຮ່າງກາຍສູງໃຫຍ່ ແລະ ມີຊື່ສຽງເພາະຄວາມແຂງແຮງຂອງ ລາວ.

ແລະ ລາວໄດ້ທ່ອງທ່ຽວໄປໃນບັນດາຜູ້ຄົນ ແລະ ໄດ້ສັ່ງສອນ ๓ ຄົນທັງຫລາຍເຖິງເລື່ອງທີ່ລາວ ຖືວ່າເປັນພຣະຄຳຂອງ ພຣະເจ้า, ກ່າວຄຳ ຕໍ່ຕ້ານສາດສະໜາจักນ; ປະກາດແກ່ຜູ້ຄົນວ່າ ປະໂລຫິດກັບຜູ້ສອນທຸກຄົນຄວນເປັນທີ່ ເຄົາລົບນັບຖື ແລະ ພວກເພີ່ນ ບໍ່ຄວນອອກແຮງງານດ້ວຍມືຂອງຕົນເອງ, ແຕ່ວ່າ ພວກເພີ່ນຄວນໄດ້ຮັບການຄ້ຳຊູຈາກຜູ້ຄົນ.

ແລະ ລາວໄດ້ສະແດງຫລັກຖານຕໍ່ຜູ້ຄົນອີກວ່າ ມະນຸດຊາດ ๔ ທັງປວງຈະລອດໃນວັນສຸດທ້າຍ, ແລະ ວ່າພວກເຂົາບໍ່ຕ້ອງ ຢ້ານກົວ ຫລື ຕົວສັ່ນ, ແຕ່ວ່າໃຫ້ພວກເຂົາເງີຍໜ້າຂຶ້ນ ແລະ ປິຕິຍິນດີ, ເພາະວ່າພຣະຜູ້ເປັນເจ้าໄດ້ສ້າງມະນຸດທັງປວງຂຶ້ນ ມາ ແລະ ໄດ້ໄຖ່ຄົນທັງປວງນຳອີກ, ແລະ ໃນຕອນສຸດທ້າຍ ມະນຸດທັງປວງຈະມີຊີວິດນິລັນດອນ.

The Book of Alma

the Son of Alma

The account of Alma, who was the son of Alma, the first and chief judge over the people of Nephi, and also the high priest over the Church. An account of the reign of the judges, and the wars and contentions among the people. And also an account of a war between the Nephites and the Lamanites, according to the record of Alma, the first and chief judge.

Alma 1

Now it came to pass that in the first year of the reign of the judges over the people of Nephi, from this time forward, king Mosiah having gone the way of all the earth, having warred a good warfare, walking uprightly before God, leaving none to reign in his stead; nevertheless he had established laws, and they were acknowledged by the people; therefore they were obliged to abide by the laws which he had made.

And it came to pass that in the first year of the reign of Alma in the judgment-seat, there was a man brought before him to be judged, a man who was large, and was noted for his much strength.

And he had gone about among the people, preaching to them that which he termed to be the word of God, bearing down against the church; declaring unto the people that every priest and teacher ought to become popular; and they ought not to labor with their hands, but that they ought to be supported by the people.

And he also testified unto the people that all mankind should be saved at the last day, and that they need not fear nor tremble, but that they might lift up their heads and rejoice; for the Lord had created all men, and had also redeemed all men; and, in the end, all men should have eternal life.

ຫ ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວໄດ້ສິດສອນເລື່ອງເຫລົ່ານີ້ ຈົນວ່າຜູ້ຄົນຫລາຍຄົນໄດ້ເຊື່ອຖືໃນຄຳເວົ້າຂອງລາວ, ຈົນວ່າຄົນເປັນຈຳນວນຫລວງຫລາຍເລີ່ມຄ້ຳຊູ ແລະ ເອົາເງິນໃຫ້ລາວ.

ຫນ ແລະ ລາວເລີ່ມມີຄວາມລະເມີເພີ້ຝັນດ້ວຍຄວາມທະນົງໃຈ ແລະ ນຸ່ງຫົ່ມດ້ວຍເສື້ອຜ້າທີ່ມີລາຄາແພງ, ແທ້ຈິງແລ້ວ, ລາວໄດ້ເລີ່ມສະຖາປະນາ ສາດສະໜາຈັກຂຶ້ນຕາມວິທີການສັ່ງສອນຂອງລາວ.

ສາ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນຂະນະທີ່ລາວກຳລັງຈະໄປສັ່ງສອນຜູ້ທີ່ເຊື່ອຖືໃນຄຳເວົ້າຂອງລາວຢູ່ນັ້ນ, ລາວໄດ້ພົບພໍ້ກັບຄົນຜູ້ໜຶ່ງຊຶ່ງເປັນສະມາຊິກຂອງສາດສະໜາຈັກຂອງພຣະເจ้า, ແທ້ຈິງແລ້ວ, ເປັນຜູ້ໜຶ່ງຂອງພວກຜູ້ສອນ ແລະ ລາວໄດ້ເລີ່ມກ່າວຄຳຫຍາບຄາຍຢ່າງຮຸນແຮງຕໍ່ຜູ້ນັ້ນວ່າ ລາວຈະຊັກຈູງຜູ້ຄົນຂອງສາດສະໜາຈັກໄປ; ແຕ່ວ່າຊາຍຄົນນັ້ນໄດ້ຕໍ່ຕ້ານລາວ ໂດຍໄດ້ຕັກເຕືອນລາວດ້ວຍ ພຣະຄຳຂອງພຣະເจ้า.

ສອ ບັດນີ້ຊື່ຂອງຊາຍຄົນນັ້ນຄື ກີເດໂອນ; ແລະ ລາວເປັນເຄື່ອງມືໃນພຣະຫັດຂອງພຣະເจ้าໃນການປົດປ່ອຍປະຊາຊົນຂອງລິມໄຮອອກຈາກຄວາມເປັນທາດ.

ສາມ ບັດນີ້ຍ້ອນວ່າກີເດໂອນໄດ້ຕໍ່ຕ້ານລາວດ້ວຍພຣະຄຳຂອງພຣະເจ้า ລາວຈຶ່ງຄຽດແຄ້ນໃຫ້ກີເດໂອນ ແລ້ວໄດ້ຖອດດາບອອກມາ ແລະ ເລີ່ມຟັນກີເດໂອນເສຍ. ບັດນີ້ກີເດໂອນໂດຍທີ່ມີອາຍຸແກ່ແລ້ວ, ສະນັ້ນ ລາວຈຶ່ງບໍ່ສາມາດຕ້ານທານໄດ້, ສະນັ້ນ ກີເດໂອນຈຶ່ງຖືກ ຂ້າດ້ວຍດາບ.

ສິບ ແລະ ຜູ້ທີ່ຂ້າກີເດໂອນໄດ້ຖືກຜູ້ຄົນຂອງສາດສະໜາຈັກຈັບໄປ ແລະ ນຳເອົາມາຢູ່ຕໍ່ໜ້າຂອງແອວມາເພື່ອຮັບການ ຕັດສິນຕາມຄວາມຜິດທີ່ລາວໄດ້ກະທຳໄວ້.

ສິບເອັດ ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວຢືນຢູ່ຕໍ່ໜ້າແອວມາ ແລະ ແກ້ຂໍ້ກ່າວຫາຢ່າງອາດຫານເພື່ອຕົວເອງ.

ສິບແປດ ແຕ່ແອວມາກ່າວກັບລາວວ່າ: ຈົ່ງເບິ່ງ, ນີ້ເປັນເທື່ອທຳອິດທີ່ການຫລອກລວງຂອງປະໂລຫິດ ຖືກເອົາມາໃຫ້ເປັນທີ່ຮູ້ຈັກໃນບັນດາຜູ້ຄົນພວກນີ້. ແລະ ຈົ່ງເບິ່ງ, ເจ้าບໍ່ພຽງແຕ່ຜິດເພາະການຫລອກລວງຂອງປະໂລຫິດເທົ່ານັ້ນ, ແຕ່ຍັງພະຍາຍາມບັງຄັບຜູ້ຄົນດ້ວຍດາບ; ແລະ ຖ້າຫາກການຫລອກລວງຂອງປະໂລຫິດຖືກບັງຄັບໃຊ້ໃນບັນດາຜູ້ຄົນແລ້ວ ກໍໝາຍຄວາມວ່າຄວາມພິນາດທັງໝົດກໍຈະເກີດຂຶ້ນແກ່ພວກເຂົາ.

ສາມສິບ ແລະ ເจ้าເຮັດໃຫ້ຄົນຊື່ສັດຜູ້ໜຶ່ງຕ້ອງຕາຍໄປ, ແທ້ຈິງແລ້ວ, ຊຶ່ງເປັນຜູ້ທີ່ໄດ້ສ້າງຄວາມດີໄວ້ຫລາຍທີ່ສຸດໃນບັນດາຜູ້ຄົນເຫລົ່ານີ້; ແລະ ຖ້າຫາກພວກເຮົາໄວ້ຊີວິດຂອງເจ้า ແລ້ວເລືອດຂອງລາວກໍຈະມາຟ້ອງພວກເຮົາເພື່ອ ແກ້ແຄ້ນ.

And it came to pass that he did teach these things so much that many did believe on his words, even so many that they began to support him and give him money.

And he began to be lifted up in the pride of his heart, and to wear very costly apparel, yea, and even began to establish a church after the manner of his preaching.

And it came to pass as he was going, to preach to those who believed on his word, he met a man who belonged to the church of God, yea, even one of their teachers; and he began to contend with him sharply, that he might lead away the people of the church; but the man withstood him, admonishing him with the words of God.

Now the name of the man was Gideon; and it was he who was an instrument in the hands of God in delivering the people of Limhi out of bondage.

Now, because Gideon withstood him with the words of God he was wroth with Gideon, and drew his sword and began to smite him. Now Gideon being stricken with many years, therefore he was not able to withstand his blows, therefore he was slain by the sword.

And the man who slew him was taken by the people of the church, and was brought before Alma, to be judged according to the crimes which he had committed.

And it came to pass that he stood before Alma and pled for himself with much boldness.

But Alma said unto him: Behold, this is the first time that priestcraft has been introduced among this people. And behold, thou art not only guilty of priestcraft, but hast endeavored to enforce it by the sword; and were priestcraft to be enforced among this people it would prove their entire destruction.

And thou hast shed the blood of a righteous man, yea, a man who has done much good among this people; and were we to spare thee his blood would come upon us for vengeance.

ສະນັ້ນ ເຈົ້າຈຶ່ງຕ້ອງ ໄດ້ຮັບໂທດປະຫານຊີວິດຕາມກົດທີ່ໂມ
ໄຊຢາ, ກະສັດຄົນສຸດທ້າຍຂອງພວກເຮົາໄດ້ໃຫ້ໄວ້; ແລະ ມັນ
ເປັນທີ່ຍອມຮັບກັນໂດຍຜູ້ຄົນພວກນີ້; ສະນັ້ນ ຜູ້ຄົນພວກນີ້
ຕ້ອງປະຕິບັດຕາມກົດນັ້ນ.

Therefore thou art condemned to die, according to the law which has been given us by Mosiah, our last king; and it has been acknowledged by this people; therefore this people must abide by the law.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ເອົາລາວໄປ
ແລະ ຊື່ຂອງລາວແມ່ນ ນີຮໍ; ແລະ ພວກເຂົາໄດ້ພາລາວຂຶ້ນໄປ
ຈອມເນີນພູແມນທາຍ, ແລະ ບ່ອນນັ້ນເປັນລະຫວ່າງຟ້າ
ສະຫວັນກັບແຜ່ນດິນໂລກ ບ່ອນທີ່ລາວຍອມຮັບว່າ ເລື່ອງທີ່
ລາວໄດ້ສິດສອນຜູ້ຄົນນັ້ນກົງກັນຂ້າມກັບພຣະຄຳຂອງ
ພຣະເຈົ້າ, ແລະ ບ່ອນທີ່ລາວໄດ້ທົນທຸກທໍລະມານ ແລະ ຕາຍ
ຢ່າງໜ້າອັບອາຍ.

And it came to pass that they took him; and his name was Nehor; and they carried him upon the top of the hill Manti, and there he was caused, or rather did acknowledge, between the heavens and the earth, that what he had taught to the people was contrary to the word of God; and there he suffered an ignominious death.

ເຖິງຢ່າງໃດກໍຕາມ, ສິ່ງນີ້ຍັງບໍ່ໄດ້ເຮັດໃຫ້ການຂະຫຍາຍຕົວ
ຂອງການຫລອກລວງຂອງປະໂລຫິດໃນທົ່ວແຜ່ນດິນຢຸດລົງ
ໄດ້ ເພາະມີຫລາຍຄົນທີ່ຮັກສິ່ງທີ່ບໍ່ມີປະໂຫຍດຂອງໂລກ, ແລະ
ພວກເຂົາໄດ້ອອກໄປສັ່ງສອນຄຳສອນທີ່ບໍ່ຖືກຕ້ອງ; ແລະ ນີ້
ພວກເຂົາໄດ້ກະທຳໄປເພື່ອເຫັນແກ່ ຄວາມຮັ່ງມີ ແລະ ກຽດ
ສັກສີຂອງຕົນເອງ.

Nevertheless, this did not put an end to the spreading of priestcraft through the land; for there were many who loved the vain things of the world, and they went forth preaching false doctrines; and this they did for the sake of riches and honor.

ເຖິງຢ່າງໃດກໍຕາມ, ພວກເຂົາຍັງບໍ່ກ້າເວົ້າ ຕົວະເພາະ
ຢ້ານກົວກົດໝາຍ, ເພາະວ່າຜູ້ທີ່ເວົ້າຕົວະຍ່ອມຖືກລົງໂທດ;
ສະນັ້ນ ພວກເຂົາຈຶ່ງທຳທ່າສັ່ງສອນຕາມຄວາມເຊື່ອຖືຂອງ
ພວກເຂົາ; ແລະ ບັດນີ້ກົດໝາຍບໍ່ມີອຳນາດກັບຜູ້ໃດໄດ້ຕາມ
ຄວາມເຊື່ອຖື ຂອງເຂົາ.

Nevertheless, they durst not lie, if it were known, for fear of the law, for liars were punished; therefore they pretended to preach according to their belief; and now the law could have no power on any man for his belief.

ແລະ ພວກເຂົາບໍ່ກ້າ ລັກເພາະຢ້ານກົວກົດໝາຍ, ເພາະວ່າ
ການກະທຳແບບນີ້ຈະໄດ້ຮັບການລົງໂທດ; ພວກເຂົາກໍບໍ່ກ້າ
ປຸ້ນສະດົມ, ຫລື ຄາດຕະກຳ, ເພາະວ່າຄົນທີ່ເຮັດ ຄາດຕະກຳຈະ
ຖືກລົງໂທດເຖິງແກ່ ຄວາມຕາຍ.

And they durst not steal, for fear of the law, for such were punished; neither durst they rob, nor murder, for he that murdered was punished unto death.

ແຕ່ເຫດການໄດ້ບັງເກີດຂຶ້ນຄື ຜູ້ໃດທີ່ບໍ່ໄດ້ເຂົ້າຮ່ວມ
ສາດສະໜາຈັກຂອງພຣະເຈົ້າໄດ້ເລີ່ມຂົ່ມເຫັງຜູ້ທີ່ເຂົ້າຮ່ວມ
ສາດສະໜາຈັກຂອງພຣະເຈົ້າ ແລະ ຜູ້ທີ່ຍອມຮັບພຣະນາມ
ຂອງພຣະຄຣິດ.

But it came to pass that whosoever did not belong to the church of God began to persecute those that did belong to the church of God, and had taken upon them the name of Christ.

ແທ້ຈິງແລ້ວ, ພວກເຂົາໄດ້ຂົ່ມເຫັງຄົນພວກເຂົາ, ແລະ ເຮັດ
ໃຫ້ພວກເຂົາຕ້ອງທຸກທໍລະມານດ້ວຍຄຳເວົ້າຕ່າງໆນາໆ, ແລະ
ນີ້ເພາະວ່າຄວາມຖ່ອມຕົວຂອງພວກເຂົາ; ເພາະວ່າພວກເຂົາບໍ່
ໄດ້ອວດດີໃນສາຍຕາຂອງຕົນເອງ, ແລະ ຍ້ອນວ່າພວກເຂົາໄດ້
ໃຫ້ພຣະຄຳຂອງພຣະເຈົ້າແກ່ກັນແລະກັນໂດຍບໍ່ໄດ້ຄິດເປັນ
ເງິນ ຫລື ຄຸນຄ່າລາຄາແຕ່ຢ່າງໃດ.

Yea, they did persecute them, and afflict them with all manner of words, and this because of their humility; because they were not proud in their own eyes, and because they did impart the word of God, one with another, without money and without price.

ບັດນີ້ມັນມີກົດເຄັ່ງຄັດຂໍ້ໜຶ່ງໃນບັນດາຜູ້ຄົນຂອງ
ສາດສະໜາຈັກ, ຄືຈະບໍ່ມີຜູ້ໃດທີ່ເປັນສະມາຊິກໃນສາດສະໜາ
ຈັກອອກໄປ ຂົ່ມເຫັງຜູ້ທີ່ບໍ່ໄດ້ເຂົ້າຮ່ວມສາດສະໜາຈັກ, ແລະ
ຈະບໍ່ມີການຂົ່ມເຫັງຊຶ່ງກັນແລະກັນໃນບັນດາພວກເຂົາເອງ.

Now there was a strict law among the people of the church, that there should not any man, belonging to the church, arise and persecute those that did not belong to the church, and that there should be no persecution among themselves.

๘๘ ເຖິງຢ່າງໃດກໍຕາມ, ຍັງມີຄົນຫລາຍຄົນໃນບັນດາພວກເຂົາ ທີ່ເລີ່ມອວດດີ ແລະ ຜິດຖຽງກັນຢ່າງຮຸນແຮງຕໍ່ຜູ້ປໍລະປັກຂອງ ຕົນຈົນວ່າມີການຕ່ອຍຕີກັນ; ແທ້ຈິງແລ້ວ, ພວກເຂົາໄດ້ຕ່ອຍຕີ ກັນດ້ວຍກຳປັ້ນ.

๘๙ ແລະ ບັດນີ້ມັນເປັນປີທີສອງຂອງການປົກຄອງຂອງແອວ ມາ, ແລະ ເປັນສາເຫດທີ່ເຮັດໃຫ້ສາດສະໜາจักมีความทุก ຫລາຍ; ແທ້ຈິງແລ້ວ, ເປັນສາເຫດໃຫ້ສາດສະໜາจักต้องมี ຄວາມຫຍຸ້ງຍາກ.

๙๔ ເພາະວ່າໃຈຂອງຫລາຍຄົນແຂງກະດ້າງ, ແລະ ຊື່ຂອງພວກ ເຂົາໄດ້ຖືກ ລຶບ, ເພື່ອບໍ່ໃຫ້ເປັນທີ່ຈື່ຈຳຕໍ່ໄປໃນບັນດາຜູ້ຄົນຂອງ ພຣະເຈົ້າ. ແລະ ມີຫລາຍຄົນໄດ້ ຖອນຕົວອອກໄປຈາກບັນດາ ພວກເຂົາ.

๙๕ ບັດນີ້ ນີ້ເປັນເລື່ອງຫຍຸ້ງຍາກອັນໃຫຍ່ຫລວງກັບຜູ້ທີ່ໝັ້ນ ຄົງຢູ່ໃນສັດທາ; ເຖິງຢ່າງໃດກໍຕາມ, ພວກເຂົາຍັງແນ່ວແນ່ ແລະ ບໍ່ຫວັ່ນໄຫວໃນການຮັກສາພຣະບັນຍັດຂອງພຣະເຈົ້າ, ແລະ ພວກເຂົາໄດ້ຮັບເອົາການຂົ່ມເຫັງທີ່ກອບໂກຍໃສ່ພວກ ເຂົາດ້ວຍ ຄວາມອົດທົນ.

๙๖ ແລະ ເວລາທີ່ປະໂລຫິດປະລະ ວຽກງານເພື່ອອອກໄປໃຫ້ ພຣະຄຳຂອງພຣະເຈົ້າແກ່ຜູ້ຄົນ, ຜູ້ຄົນກໍຕ້ອງປະລະວຽກງານ ຂອງຕົນເພື່ອໄປຟັງພຣະຄຳຂອງພຣະເຈົ້າຄືກັນ. ແລະ ເມື່ອ ປະໂລຫິດໃຫ້ພຣະຄຳຂອງພຣະເຈົ້າແກ່ຜູ້ຄົນແລ້ວ ພວກເຂົາກໍ ກັບຄືນໄປເຮັດວຽກຢ່າງພາກພຽນອີກ; ແລະ ຜູ້ສອນບໍ່ໄດ້ຖືຕົວ ວ່າຕົນເອງສູງກວ່າຜູ້ຟັງ, ເພາະຜູ້ສອນບໍ່ໄດ້ດີກວ່າຜູ້ຟັງ, ທັງ ຜູ້ສອນບໍ່ໄດ້ດີກວ່າຜູ້ຮຽນເລີຍ; ແລະ ດັ່ງນັ້ນ ຄົນທັງຫລາຍຈຶ່ງ ເທົ່າທຽມກັນ, ແລະ ພວກເຂົາທັງໝົດທຳງານ, ທຸກຄົນ ຕາມ ກຳລັງຂອງຕົນ.

๙๗ ແລະ ພວກເຂົາ ໃຫ້ເຂົ້າຂອງ ຂອງພວກເຂົາ, ທຸກຄົນຕາມທີ່ ພວກເຂົາມີ, ໃຫ້ແກ່ ຄົນຍາກຈົນ, ແລະ ຄົນຂັດສົນ, ແລະ ຄົນ ເຈັບປ່ວຍ, ແລະ ຄົນທີ່ເປັນທຸກ; ແລະ ພວກເຂົາບໍ່ໄດ້ໃສ່ເສື້ອຜ້າ ທີ່ມີລາຄາແພງ, ແຕ່ພວກເຂົາກໍຍັງຮຽບຮ້ອຍ ແລະ ໜ້າຊົມ.

๙๘ ແລະ ພວກເຂົາຈຶ່ງໄດ້ສະຖາປະນາການງານຂອງ ສາດສະໜາຈັກຂຶ້ນແບບນີ້; ແລະ ເຖິງແມ່ນການຂົ່ມເຫັງ ທັງໝົດຂອງພວກເຂົາ, ແຕ່ພວກເຂົາເລີ່ມມີສັນຕິສຸກຕິດຕໍ່ກັນ ອີກດັ່ງນີ້.

Nevertheless, there were many among them who began to be proud, and began to contend warmly with their adversaries, even unto blows; yea, they would smite one another with their fists.

Now this was in the second year of the reign of Alma, and it was a cause of much affliction to the church; yea, it was the cause of much trial with the church.

For the hearts of many were hardened, and their names were blotted out, that they were remembered no more among the people of God. And also many withdrew themselves from among them.

Now this was a great trial to those that did stand fast in the faith; nevertheless, they were steadfast and immovable in keeping the commandments of God, and they bore with patience the persecution which was heaped upon them.

And when the priests left their labor to impart the word of God unto the people, the people also left their labors to hear the word of God. And when the priest had imparted unto them the word of God they all returned again diligently unto their labors; and the priest, not esteeming himself above his hearers, for the preacher was no better than the hearer, neither was the teacher any better than the learner; and thus they were all equal, and they did all labor, every man according to his strength.

And they did impart of their substance, every man according to that which he had, to the poor, and the needy, and the sick, and the afflicted; and they did not wear costly apparel, yet they were neat and comely.

And thus they did establish the affairs of the church; and thus they began to have continual peace again, notwithstanding all their persecutions.

ຄ໙ ແລະ ບັດນີ້ເພາະວ່າຄວາມໝັ້ນຄົງຂອງສາດສະໜາຈັກ ພວກເຂົາຈຶ່ງເປັນຄົນ ຮັ່ງມີຢ່າງຍິ່ງ, ໂດຍມີທຸກສິ່ງຢ່າງ ຫລວງຫລາຍບໍ່ວ່າອັນໃດກໍຕາມທີ່ພວກເຂົາຕ້ອງການ—ແລະ ມີຝູງສັດລ້ຽງ ແລະ ຝູງສັດໃຊ້ແຮງງານ, ແລະ ລູກສັດລ້ຽງທຸກ ຊະນິດ, ແລະ ພືດພັນຢ່າງຫລວງຫລາຍ, ພ້ອມທັງຄຳ, ແລະ ພ້ອມທັງເງິນ, ແລະ ຂອງມີຄ່າ, ແລະ ຜ້າໄໝ ແລະ ຜ້າລີນິນຕ່ຳ ຢ່າງດີຫລວງຫລາຍ, ແລະ ຜ້າຢ່າງດີທຸກຊະນິດທີ່ໃຊ້ໃນບ້ານ.

ມ໐ ແລະ ໃນສະພາບອັນ ຈະເລີນຮຸ່ງເຮືອງຂອງພວກເຂົາແບບ ນີ້, ພວກເຂົາບໍ່ໄດ້ປະໃຫ້ຜູ້ໃດ ເປືອຍເປົ່າ, ຫລື ຫິວໂຫຍ, ຫລື ກະຫາຍນ້ຳ, ຫລື ເຈັບປວດ, ຫລື ຂາດການບຳລຸງລ້ຽງ; ແລະ ພວກເຂົາບໍ່ໄດ້ໝົກໝຸ້ນຢູ່ກັບຂອງມີຄ່າ; ສະນັ້ນ ພວກເຂົາຈຶ່ງ ແຈກຢາຍໃຫ້ແກ່ທຸກຄົນທັງຜູ້ເຖົ້າ ແລະ ຜູ້ໜຸ່ມ, ທັງຂ້າທາດ ແລະ ຜູ້ເປັນອິດສະລະ, ທັງຊາຍ ແລະ ຍິງ, ບໍ່ວ່າຈະຢູ່ນອກ ສາດສະໜາຈັກ, ຫລື ຢູ່ໃນສາດສະໜາຈັກກໍຕາມ ໂດຍບໍ່ໄດ້ ເຫັນແກ່ຜູ້ໃດຜູ້ໜຶ່ງເມື່ອຄົນເຫລົ່ານັ້ນຢູ່ໃນຄວາມຕ້ອງການ.

ມ໑ ແລະ ພວກເຂົາໄດ້ຈະເລີນຮຸ່ງເຮືອງ ແລະ ຮັ່ງມີເປັນດີກວ່າຜູ້ ທີ່ບໍ່ໄດ້ເປັນຂອງສາດສະໜາຈັກຂອງພວກເຂົາດັ່ງນັ້ນ.

ມ໒ ເພາະວ່າຜູ້ທີ່ບໍ່ໄດ້ເປັນຂອງສາດສະໜາຈັກຂອງພວກເຂົາ ໄດ້ເອົາໃຈໃສ່ກັບເວດມົນຄາຖາ, ແລະ ກັບ ການນັບຖືຮູບບູຊາ ຫລື ຄວາມຂີ້ຄ້ານມັກງ່າຍ; ແລະ ການເວົ້າບໍ່ມີສາລະ, ແລະ ການອິດສາບັງບຽດ ແລະ ການຜິດຖຽງກັນ, ນຸ່ງຖືເສື້ອຜ້າທີ່ມີ ລາຄາແພງ; ລະເມີເພີ້ຝັນດ້ວຍຄວາມທະນົງຕົວໃນສາຍຕາ ຂອງຕົນເອງ; ຂົ່ມເຫັງ, ເວົ້າຕົວະ, ຂີ້ລັກມັກສົກ, ການທຳການ ໂສເພນີ, ແລະ ການຄາດຕະກຳ, ແລະ ກະທຳຄວາມຊົ່ວຮ້າຍ ນາໆປະການ; ເຖິງຢ່າງໃດກໍຕາມ, ກົດໝາຍຍັງໄດ້ບັງຄັບຜູ້ທີ່ ລ່ວງລະເມີດມັນເທົ່າທີ່ຈະເຮັດໄດ້.

ມ໓ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂດຍການໃຊ້ກົດໝາຍກັບ ຜູ້ຄົນ, ດັ່ງນັ້ນ ທຸກຄົນຈຶ່ງຕ້ອງໄດ້ຮັບໂທດຕາມຄວາມຜິດຂອງ ຕົນ, ມັນຈຶ່ງມີຄວາມສະຫງົບລົງ, ແລະ ບໍ່ມີຜູ້ໃດກ້າເຮັດຄວາມ ຊົ່ວຮ້າຍໃດໆ ດັ່ງທີ່ຮູ້ຈັກກັນ; ສະນັ້ນ, ຈຶ່ງມີສັນຕິສຸກຫລາຍໃນ ບັນດາຜູ້ຄົນຂອງນີໄຟຈົນເຖິງປີທີຫ້າແຫ່ງການປົກຄອງຂອງ ຜູ້ຕັດສິນ.

And now, because of the steadiness of the church they began to be exceedingly rich, having abundance of all things whatsoever they stood in need—an abundance of flocks and herds, and fatlings of every kind, and also abundance of grain, and of gold, and of silver, and of precious things, and abundance of silk and fine-twined linen, and all manner of good homely cloth.

And thus, in their prosperous circumstances, they did not send away any who were naked, or that were hungry, or that were athirst, or that were sick, or that had not been nourished; and they did not set their hearts upon riches; therefore they were liberal to all, both old and young, both bond and free, both male and female, whether out of the church or in the church, having no respect to persons as to those who stood in need.

And thus they did prosper and become far more wealthy than those who did not belong to their church.

For those who did not belong to their church did indulge themselves in sorceries, and in idolatry or idleness, and in babblings, and in envyings and strife; wearing costly apparel; being lifted up in the pride of their own eyes; persecuting, lying, thieving, robbing, committing whoredoms, and murdering, and all manner of wickedness; nevertheless, the law was put in force upon all those who did transgress it, inasmuch as it was possible.

And it came to pass that by thus exercising the law upon them, every man suffering according to that which he had done, they became more still, and durst not commit any wickedness if it were known; therefore, there was much peace among the people of Nephi until the fifth year of the reign of the judges.

ແອວມາ ๒

๑ ແລະ ເຫດການໄດ້ບັງເກີດຂຶ້ນເລີ່ມຈາກປີທີຫ້າແຫ່ງການ
ປົກຄອງຂອງພວກເຂົາ, ມັນເລີ່ມມີການຜິດຖຽງກັນໃນບັນດາ
ຜູ້ຄົນ; ເພາະວ່າມີຄົນຜູ້ໜຶ່ງຊື່ວ່າ ອາມລິໄຊ, ລາວເປັນຄົນ
ສະຫລາດແກມໂກງ, ແທ້ຈິງແລ້ວ, ລາວເປັນຄົນສະຫລາດຕາມ
ລະບຽບຂອງໂລກ, ລາວເປັນຄົນແບບດຽວກັບຜູ້ທີ່ຂ້າ
ກີເດໂອນດ້ວຍດາບ ຜູ້ຊຶ່ງໄດ້ຖືກປະຫານຊີວິດໄປແລ້ວຕາມ
ກົດໝາຍ—

๒ ບັດນີ້ອາມລິໄຊຄົນນີ້ໄດ້ຊັກຊວນຜູ້ຄົນຫລາຍຄົນໃຫ້ຄິດຕາມ
ລາວໄປດ້ວຍເລ່ຫລ່ຽມຂອງລາວ; ມາກຫລາຍຈົນພວກເຂົາ
ເລີ່ມມີອຳນາດຫລາຍຂຶ້ນ; ແລະ ພວກເຂົາເລີ່ມພະຍາຍາມ
ສະຖາປະນາອາມລິໄຊໃຫ້ເປັນກະສັດປົກຄອງພວກເຂົາ.

๓ ບັດນີ້ມັນເຮັດໃຫ້ຜູ້ຄົນຂອງສາດສະໜາຈັກຕື່ນຕົກໃຈພ້ອມ
ທັງຜູ້ຄົນທີ່ບໍ່ໄດ້ຖືກຊັກນຳໄປຕາມການຊັກນຳຂອງອາມລິໄຊ
ນຳອີກ; ເພາະວ່າພວກເຂົາຮູ້ວ່າຕາມກົດໝາຍຂອງພວກເຂົາ
ເລື່ອງແບບນີ້ຕ້ອງສະຖາປະນາຂຶ້ນໂດຍ ສຽງຂອງຜູ້ຄົນ.

๔ ສະນັ້ນ, ຖ້າຫາກເປັນໄປໄດ້ທີ່ອາມລິໄຊຈະໄດ້ສຽງຂອງ
ປະຊາຊົນ, ໂດຍທີ່ລາວເປັນຄົນຊົ່ວ, ລາວຈະ ເຮັດໃຫ້ຄົນທັງໝົດ
ໝົດສິດ ແລະ ສິດທິພິເສດຂອງສາດສະໜາຈັກ; ເພາະວ່າມັນ
ເປັນເຈດຕະນາຂອງລາວທີ່ຈະທຳລາຍສາດສະໜາຈັກຂອງ
ພຣະເຈົ້າ.

๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນໄດ້ມາຊຸມນຸມກັນ
ຕະຫລອດທົ່ວແຜ່ນດິນຕາມຄວາມສະໝັກໃຈຂອງໃຜລາວ,
ແລ້ວແຕ່ຈະໄປນຳອາມລິໄຊ, ຫລື ວ່າຈະຕໍ່ຕ້ານລາວ ໄດ້ແຍກກັນ
ເປັນກຸ່ມໆ, ໂດຍມີການໂຕ້ຖຽງ ແລະ ຂັດແຍ້ງກັນຢ່າງໜ້າ
ປະຫລາດ.

๖ ແລະ ພວກເຂົາໄດ້ມາຊຸມນຸມກັນແນວນັ້ນ ເພື່ອອອກສຽງ
ຂອງຕົນກ່ຽວກັບເລື່ອງນີ້ ແລະ ໄດ້ນຳສະເໜີເລື່ອງນີ້ຕໍ່ຜູ້
ຕັດສິນ.

๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ສຽງຂອງຜູ້ຄົນໄດ້ຕໍ່ຕ້ານ
ອາມລິໄຊ, ຈົນວ່າລາວບໍ່ໄດ້ເປັນກະສັດປົກຄອງຜູ້ຄົນ.

๘ ແລະ ບັດນີ້ມັນໄດ້ເຮັດໃຫ້ໃຈຂອງຜູ້ທີ່ຄັດຄ້ານລາວປິຕິຍິນດີ
ທີ່ສຸດ; ແຕ່ອາມລິໄຊໄດ້ຍຸຍົງຜູ້ທີ່ເຫັນດ້ວຍກັບລາວໃຫ້ຄຽດ
ແຄ້ນໃຫ້ຜູ້ທີ່ບໍ່ເຫັນດ້ວຍກັບລາວ.

๙ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ມາເຕົ້າໂຮມກັນ
ແລະ ໄດ້ແຕ່ງຕັ້ງອາມລິໄຊໃຫ້ເປັນກະສັດຂອງພວກເຂົາ.

Alma 2

And it came to pass in the commencement of the fifth year of their reign there began to be a contention among the people; for a certain man, being called Amlici, he being a very cunning man, yea, a wise man as to the wisdom of the world, he being after the order of the man that slew Gideon by the sword, who was executed according to the law—

Now this Amlici had, by his cunning, drawn away much people after him; even so much that they began to be very powerful; and they began to endeavor to establish Amlici to be a king over the people.

Now this was alarming to the people of the church, and also to all those who had not been drawn away after the persuasions of Amlici; for they knew that according to their law that such things must be established by the voice of the people.

Therefore, if it were possible that Amlici should gain the voice of the people, he, being a wicked man, would deprive them of their rights and privileges of the church; for it was his intent to destroy the church of God.

And it came to pass that the people assembled themselves together throughout all the land, every man according to his mind, whether it were for or against Amlici, in separate bodies, having much dispute and wonderful contentions one with another.

And thus they did assemble themselves together to cast in their voices concerning the matter; and they were laid before the judges.

And it came to pass that the voice of the people came against Amlici, that he was not made king over the people.

Now this did cause much joy in the hearts of those who were against him; but Amlici did stir up those who were in his favor to anger against those who were not in his favor.

And it came to pass that they gathered themselves together, and did consecrate Amlici to be their king.

๑๐ ບັດນີ້ເມື່ອອາມລິໄຊໄດ້ເປັນກະສັດປົກຄອງພວກເຂົາແລ້ວ ລາວກໍສັ່ງໃຫ້ຜູ້ຄົນຈັບອາວຸດຂຶ້ນຕໍ່ສູ້ກັບພີ່ນ້ອງຂອງພວກເຂົາ; ແລະ ສິ່ງນີ້ເຮັດໄປເພື່ອລາວຈະເຮັດໃຫ້ພວກນັ້ນມາຂຶ້ນກັບ ລາວ.

Now when Amlici was made king over them he commanded them that they should take up arms against their brethren; and this he did that he might subject them to him.

๑๑ ບັດນີ້ຜູ້ຄົນຂອງອາມລິໄຊແຕກຕ່າງອອກໄປຕາມຊື່ຂອງອາມ ລິໄຊ, ໂດຍມີຊື່ວ່າ ຊາວ ອາມລິໄຊ; ແລະ ຜູ້ທີ່ເຫລືອຢູ່ມີຊື່ວ່າ ຊາວ ນີໄຟ, ຫລື ຜູ້ຄົນຂອງພຣະເຈົ້າ.

Now the people of Amlici were distinguished by the name of Amlici, being called Amlicites; and the remainder were called Nephites, or the people of God.

๑๒ ສະນັ້ນ ຜູ້ຄົນຊາວນີໄຟໄດ້ຮູ້ຈັກເຖິງເຈດຕະນາຂອງຊາວອາມ ລິໄຊ, ແລະ ສະນັ້ນພວກເຂົາຈຶ່ງໄດ້ຕຽມພ້ອມເພື່ອຈະໄດ້ປະເຊີນ ໜ້າກັບຊາວອາມລິໄຊ; ແທ້ຈິງແລ້ວ, ພວກເຂົາໄດ້ຖືອາວຸດທຸກ ຊະນິດເຊັ່ນດາບ ແລະ ດາບສອງຄົມ, ຄັນທະນູ ແລະ ລູກທະນູ, ກ້ອນຫີນ ແລະ ກະຖຸນ, ແລະ ອາວຸດແຫ່ງສົງຄາມທຸກຊະນິດ.

Therefore the people of the Nephites were aware of the intent of the Amlicites, and therefore they did prepare to meet them; yea, they did arm themselves with swords, and with cimeters, and with bows, and with arrows, and with stones, and with slings, and with all manner of weapons of war, of every kind.

๑๓ ແລະ ພວກເຂົາຕຽມພ້ອມເພື່ອຈະໄດ້ປະເຊີນໜ້າກັບຊາວ ອາມລິໄຊທີ່ຈະຍົກທັບມາຕີດັ່ງນັ້ນ. ແລະ ໄດ້ມີການແຕ່ງຕັ້ງ ນາຍທະຫານ, ແລະ ນາຍທະຫານຊັ້ນສູງ, ແລະ ຫົວໜ້ານາຍ ທະຫານ, ຕາມຈຳນວນຜູ້ຄົນຂອງພວກເຂົາ.

And thus they were prepared to meet the Amlicites at the time of their coming. And there were appointed captains, and higher captains, and chief captains, according to their numbers.

๑๔ ແລະ ເຫດການໄດ້ບັງເກີດຂຶ້ນຄື ອາມລິໄຊໄດ້ສັ່ງໃຫ້ຜູ້ຄົນຖື ອາວຸດແຫ່ງສົງຄາມທຸກຊະນິດ; ແລະ ລາວໄດ້ແຕ່ງຕັ້ງຜູ້ ປົກຄອງ ແລະ ຜູ້ນຳດູແລຜູ້ຄົນຂອງລາວຄືກັນ ເພື່ອຈະໄດ້ນຳ ເອົາຄົນເຫລົ່ານັ້ນໄປເຮັດສົງຄາມກັບພີ່ນ້ອງຂອງຕົນ.

And it came to pass that Amlici did arm his men with all manner of weapons of war of every kind; and he also appointed rulers and leaders over his people, to lead them to war against their brethren.

๑๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວອາມລິໄຊໄດ້ຍົກທັບ ມາເຖິງເນີນພູອາມໄນຫູ, ຊຶ່ງຢູ່ທາງເບື້ອງຕາເວັນອອກຂອງ ແມ່ນ້ຳຊີໂດນ, ຊຶ່ງໄຫລຜ່ານ ແຜ່ນດິນເຊຣາເຮັມລາ, ແລະ ຢູ່ ບ່ອນນັ້ນທີ່ພວກເຂົາໄດ້ເລີ່ມຕໍ່ສູ້ກັບຊາວນີໄຟ.

And it came to pass that the Amlicites came upon the hill Amnihu, which was east of the river Sidon, which ran by the land of Zarahemla, and there they began to make war with the Nephites.

๑๖ ບັດນີ້, ແອວມາໂດຍທີ່ເປັນ ຫົວໜ້າຜູ້ຕັດສິນ ແລະ ຜູ້ ປົກຄອງຜູ້ຄົນຂອງນີໄຟ, ສະນັ້ນ ເພິ່ນຈຶ່ງໄດ້ຂຶ້ນໄປພ້ອມກັບ ຜູ້ຄົນຂອງເພິ່ນ, ແທ້ຈິງແລ້ວ, ພ້ອມກັບນາຍທະຫານຂອງ ເພິ່ນ, ແລະ ຫົວໜ້ານາຍທະຫານຂອງເພິ່ນ, ແທ້ຈິງແລ້ວ, ເພິ່ນ ໄດ້ນຳໜ້າກອງທັບຂອງເພິ່ນໄປສູ້ຮົບກັບຊາວອາມລິໄຊ.

Now Alma, being the chief judge and the governor of the people of Nephi, therefore he went up with his people, yea, with his captains, and chief captains, yea, at the head of his armies, against the Amlicites to battle.

๑๗ ແລະ ພວກເຂົາເລີ່ມຂ້າຟັນຊາວອາມລິໄຊໃນເນີນພູທາງ ຕາເວັນອອກຂອງແມ່ນ້ຳຊີໂດນ. ແລະ ຊາວອາມລິໄຊໄດ້ຕໍ່ສູ້ກັບ ຊາວນີໄຟດ້ວຍກຳລັງອັນມະຫາສານ, ເຖິງຂະໜາດທີ່ຊາວນີໄຟ ເປັນຈຳນວນຫລວງຫລາຍໄດ້ລົ້ມຕາຍຕໍ່ໜ້າຊາວອາມລິໄຊ.

And they began to slay the Amlicites upon the hill east of Sidon. And the Amlicites did contend with the Nephites with great strength, insomuch that many of the Nephites did fall before the Amlicites.

๑๘ ເຖິງຢ່າງໃດກໍຕາມ ພຣະຜູ້ເປັນເຈົ້າຍັງປະທານກຳລັງໃຫ້ແກ່ ມືຂອງຊາວນີໄຟຢູ່, ຈົນວ່າໄດ້ຂ້າຊາວອາມລິໄຊເປັນຈຳນວນ ຫລວງຫລາຍ, ຈົນວ່າຊາວອາມລິໄຊເລີ່ມປົບໜີໄປຕໍ່ໜ້າພວກ ເຂົາ.

Nevertheless the Lord did strengthen the hand of the Nephites, that they slew the Amlicites with great slaughter, that they began to flee before them.

ຄ.ສ. ๑๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວນີໄຟໄດ້ໄລ່ຕິດຕາມຊາວ
ອາມລິໄຊໄປໝົດມື້ນັ້ນ, ແລະ ໄດ້ຂ້າພວກເຂົາຢ່າງ
ຫລວງຫລາຍ, ເຖິງຂະໜາດທີ່ມີຊາວອາມລິໄຊຖືກ ຂ້າຕາຍ
ເຖິງໜຶ່ງໝື່ນສອງພັນຫ້າຮ້ອຍສາມສິບສອງຄົນ; ແລະ ມີຊາວ
ນີໄຟຖືກຂ້າຕາຍຫົກພັນຫ້າຮ້ອຍຫົກສິບສອງຄົນ.

And it came to pass that the Nephites did pursue the Amlicites all that day, and did slay them with much slaughter, insomuch that there were slain of the Amlicites twelve thousand five hundred thirty and two souls; and there were slain of the Nephites six thousand five hundred sixty and two souls.

๘๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອແອວມາບໍ່ສາມາດໄລ່
ຕາມຊາວອາມລິໄຊຕໍ່ໄປອີກແລ້ວ ເພິ່ນຈຶ່ງສັ່ງໃຫ້ຜູ້ຄົນຂອງເພິ່ນ
ຕັ້ງຄ້າຍຂຶ້ນໃນ ຮ່ອມພູກີເດໂອນ, ເອີ້ນຮ່ອມພູນີ້ຕາມຊື່ຂອງ
ກີເດໂອນ ຊຶ່ງຖືກຂ້າຕາຍດ້ວຍດາບໂດຍມືຂອງ ນີຮໍ; ແລະ ຊາວ
ນີໄຟໄດ້ຕັ້ງຄ້າຍຂຶ້ນຢູ່ໃນຮ່ອມພູນີ້ໃນຄືນນັ້ນ.

And it came to pass that when Alma could pursue the Amlicites no longer he caused that his people should pitch their tents in the valley of Gideon, the valley being called after that Gideon who was slain by the hand of Nehor with the sword; and in this valley the Nephites did pitch their tents for the night.

๘๑ ແລະ ແອວມາໄດ້ສົ່ງຄົນສອດແນມອອກຕິດຕາມຊາວອາມລິ
ໄຊທີ່ເຫລືອຢູ່ເພື່ອເພິ່ນຈະໄດ້ຮູ້ຈັກແຜນການ ແລະ ກົນອຸບາຍ
ຂອງພວກເຂົາ, ຊຶ່ງໂດຍທາງນີ້ ເພິ່ນຈຶ່ງຈະໄດ້ປ້ອງກັນຕົວໃຫ້
ພົ້ນຈາກພວກເຂົາ, ເພື່ອເພິ່ນຈະໄດ້ປົກປັກຮັກສາຜູ້ຄົນຂອງ
ເພິ່ນບໍ່ໃຫ້ຖືກທຳລາຍ.

And Alma sent spies to follow the remnant of the Amlicites, that he might know of their plans and their plots, whereby he might guard himself against them, that he might preserve his people from being destroyed.

๘๒ ບັດນີ້ ຄົນທີ່ເພິ່ນສົ່ງໄປເບິ່ງຄ້າຍຂອງຊາວອາມລິໄຊນັ້ນຊື່ວ່າ
ຊີຣໍາ, ອາມນໍ, ແມນທາຍ, ແລະ ລິມເຮີ; ພວກນີ້ໄດ້ອອກໄປ
ພ້ອມຄົນຈຳນວນໜຶ່ງ ເພື່ອຕິດຕາມເບິ່ງຄ້າຍຂອງຊາວອາມລິ
ໄຊ.

Now those whom he had sent out to watch the camp of the Amlicites were called Zeram, and Amnor, and Manti, and Limher; these were they who went out with their men to watch the camp of the Amlicites.

๘๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນມື້ຕໍ່ມາ ພວກເຂົາໄດ້ກັບ
ຄືນມາຫາຄ້າຍຂອງຊາວນີໄຟຢ່າງຮີບຮ້ອນທີ່ສຸດ, ຊຶ່ງມີຄວາມ
ແປກປະຫລາດໃຈ, ແລະ ມີຄວາມຢ້ານກົວຫລາຍ, ໂດຍກ່າວ
ວ່າ:

And it came to pass that on the morrow they returned into the camp of the Nephites in great haste, being greatly astonished, and struck with much fear, saying:

๘๔ ຈົ່ງເບິ່ງ, ພວກເຮົາໄດ້ຕິດຕາມໄປຫາຄ້າຍຂອງ ຊາວອາມລິໄຊ
ແລະ ເຮັດໃຫ້ພວກເຮົາປະຫລາດໃຈ ຫລາຍທີ່ສຸດ, ເພາະວ່າ
ຢູ່ໃນແຜ່ນດິນໄມນອນທາງເໜືອແຜ່ນດິນເຊຣາເຮັມລາ, ຢູ່ໃນ
ເສັ້ນທາງໄປຫາແຜ່ນດິນ ນີໄຟນັ້ນ, ພວກເຮົາໄດ້ເຫັນທະຫານ
ຊາວເລມັນເປັນຈຳນວນຫລວງຫລາຍ; ແລະ ຈົ່ງເບິ່ງ, ຊາວອາມ
ລິໄຊໄດ້ເຂົ້າສົມທົບກັບພວກເຂົາ;

Behold, we followed the camp of the Amlicites, and to our great astonishment, in the land of Minon, above the land of Zarahemla, in the course of the land of Nephi, we saw a numerous host of the Lamanites; and behold, the Amlicites have joined them;

๘๕ ແລະ ພວກເຂົາໄດ້ຍົກກອງທັບມາເຖິງພວກອ້າຍນ້ອງຂອງ
ພວກເຮົາຜູ້ຢູ່ໃນແຜ່ນດິນນັ້ນ; ແລະ ພວກເຂົາໄດ້ໜີໄປກ່ອນ
ພ້ອມທັງຝູງສັດລ້ຽງ, ແລະ ເມຍຂອງພວກເຂົາ, ແລະ ລູກຂອງ
ພວກເຂົາ, ມຸ້ງໜ້າມາຫາເມືອງຂອງພວກເຮົາ; ແລະ ຖ້າຫາກ
ພວກເຮົາບໍ່ຟ້າວໄປ, ພວກເຂົາຈະເປັນເຈົ້າຂອງເມືອງຂອງ
ພວກເຮົາ, ແລະ ບິດາຂອງພວກເຮົາ, ແລະ ເມຍຂອງພວກເຮົາ,
ແລະ ລູກຂອງພວກເຮົາຈະຖືກຂ້າ.

And they are upon our brethren in that land; and they are fleeing before them with their flocks, and their wives, and their children, towards our city; and except we make haste they obtain possession of our city, and our fathers, and our wives, and our children be slain.

๘๖ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນຂອງນີໄຟຈຶ່ງໄດ້ຟ້າວ
ມ້ຽນມັດເອົາຜ້າເຕັນຂອງພວກເຂົາ, ແລະ ອອກຈາກຮ່ອມພູ
ກີເດໂອນ ມຸ້ງໜ້າໄປຫາເມືອງຂອງພວກເຂົາ, ຄືເມືອງ ເຊຣາ
ເຮັມລາ.

And it came to pass that the people of Nephi took their tents, and departed out of the valley of Gideon towards their city, which was the city of Zarahemla.

ຄ೧ ແລະ ຈົ່ງເບິ່ງ, ໃນຂະນະທີ່ພວກເຂົາກຳລັງຈະຂ້າມແມ່ນ້ຳ ຊີໂດນຢູ່ນັ້ນ, ຊາວເລມັນກັບຊາວອາມລິໄຊ, ຊຶ່ງມີ ຈຳນວນຫລາຍ, ຄືກັບວ່າ ເມັດຊາຍໃນທະເລໄດ້ເຂົ້າມາໂຈມຕີ ເພື່ອທຳລາຍພວກເຂົາ.

And behold, as they were crossing the river Sidon, the Lamanites and the Amlicites, being as numerous almost, as it were, as the sands of the sea, came upon them to destroy them.

ຄ೧ ເຖິງຢ່າງໃດກໍຕາມ, ຊາວນີໄຟໂດຍໄດ້ຮັບ ກຳລັງຈາກພຣະ ຫັດຂອງພຣະຜູ້ເປັນເຈົ້າ, ໂດຍໄດ້ອະທິຖານຢ່າງສຸດກຳລັງຕໍ່ ພຣະອົງເພື່ອພຣະອົງຈະໄດ້ປົດປ່ອຍພວກເຂົາໃຫ້ພົ້ນຈາກກຳ ມືຂອງສັດຕູຂອງພວກເຂົາ, ສະນັ້ນ ພຣະຜູ້ເປັນເຈົ້າຈຶ່ງໄດ້ຍິນ ສຽງອ້ອນວອນຂອງພວກເຂົາ ແລະ ໄດ້ປະທານກຳລັງໃຫ້ພວກ ເຂົາ, ແລະ ຊາວເລມັນກັບຊາວອາມລິໄຊໄດ້ລົ້ມຕາຍລົງຕໍ່ໜ້າ ພວກເຂົາເປັນຈຳນວນຫລວງຫລາຍ.

Nevertheless, the Nephites being strengthened by the hand of the Lord, having prayed mightily to him that he would deliver them out of the hands of their enemies, therefore the Lord did hear their cries, and did strengthen them, and the Lamanites and the Amlicites did fall before them.

ຄ೧ ແລະ ເຫດການໄດ້ບັງເກີດຂຶ້ນຄື ແອວມາໄດ້ຕໍ່ສູ້ກັບອາມລິໄຊ ຕົວຕໍ່ຕົວດ້ວຍດາບ, ແລະ ທັງສອງໄດ້ຕໍ່ສູ້ກັນຢ່າງສຸດກຳລັງ.

And it came to pass that Alma fought with Amlici with the sword, face to face; and they did contend mightily, one with another.

೧೦ ແລະ ເຫດການໄດ້ບັງເກີດຂຶ້ນຄື ແອວມາໂດຍເປັນຄົນຂອງ ພຣະເຈົ້າ, ໂດຍທີ່ມີ ສັດທາອັນແຮງກ້າ ຈຶ່ງໄດ້ຮ້ອງອອກມາວ່າ: ໂອ້ ພຣະຜູ້ເປັນເຈົ້າ, ຂໍຈົ່ງໂປດເມດຕາ ແລະ ໄວ້ຊີວິດຂອງຂ້າ ນ້ອຍດ້ວຍເຖີດ, ເພື່ອວ່າຂ້ານ້ອຍຈະໄດ້ເປັນເຄື່ອງມືໃນພຣະຫັດ ຂອງພຣະອົງໃນການຊ່ວຍເຫລືອ ແລະ ປົກປັກຮັກສາຜູ້ຄົນ ພວກນີ້.

And it came to pass that Alma, being a man of God, being exercised with much faith, cried, saying: O Lord, have mercy and spare my life, that I may be an instrument in thy hands to save and preserve this people.

೧೧ ບັດນີ້ເມື່ອແອວມາກ່າວຄຳເຫລົ່ານີ້ແລ້ວ ເພີ່ນກໍໄດ້ຕໍ່ສູ້ກັບ ອາມລິໄຊອີກ; ແລະ ເພີ່ນໄດ້ຮັບກຳລັງ, ເຖິງຂະໜາດທີ່ເພີ່ນໄດ້ ຂ້າອາມລິໄຊດ້ວຍດາບ.

Now when Alma had said these words he contended again with Amlici; and he was strengthened, insomuch that he slew Amlici with the sword.

೧೧ ແລະ ເພີ່ນໄດ້ຕໍ່ສູ້ກັບກະສັດຂອງຊາວເລມັນນຳອີກ; ແຕ່ວ່າ ກະສັດຂອງຊາວເລມັນໄດ້ປົບໜີໄປຕໍ່ໜ້າແອວມາ ແລະ ໄດ້ສົ່ງ ທະຫານອາລັກຂາຂອງຕົນມາຕໍ່ສູ້ກັບແອວມາ.

And he also contended with the king of the Lamanites; but the king of the Lamanites fled back from before Alma and sent his guards to contend with Alma.

೧೧ ແຕ່ແອວມາກັບທະຫານອາລັກຂາຂອງເພີ່ນໄດ້ຕໍ່ສູ້ກັບ ທະຫານອາລັກຂາຂອງກະສັດຂອງຊາວເລມັນ ຈົນວ່າເພີ່ນໄດ້ ຂ້າ ແລະ ຂັບໄລ່ພວກເຂົາໃຫ້ຖອຍກັບຄືນໄປ.

But Alma, with his guards, contended with the guards of the king of the Lamanites until he slew and drove them back.

೧೧ ແລະ ເພີ່ນຈຶ່ງໄດ້ກວາດລ້າງແຜ່ນດິນແນວນີ້, ຫລື ແທ້ຈິງ ແລ້ວ, ຝັ່ງຊຶ່ງຢູ່ທາງຕາເວັນຕົກຂອງແມ່ນ້ຳຊີໂດນ, ໄດ້ໂຍນສົບ ຊາວເລມັນຜູ້ທີ່ຖືກຂ້າຕາຍລົງໃນນ້ຳຊີໂດນເພື່ອໃຫ້ຜູ້ຄົນຂອງ ເພີ່ນມີບ່ອນຂ້າມໄປຕໍ່ສູ້ກັບຊາວເລມັນ ແລະ ຊາວອາມລິໄຊທາງ ຝັ່ງຕາເວັນຕົກຂອງແມ່ນ້ຳຊີໂດນໄດ້ສະດວກ.

And thus he cleared the ground, or rather the bank, which was on the west of the river Sidon, throwing the bodies of the Lamanites who had been slain into the waters of Sidon, that thereby his people might have room to cross and contend with the Lamanites and the Amlicites on the west side of the river Sidon.

೧೫ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພວກເຂົາຂ້າມແມ່ນ້ຳ ຊີໂດນໄປແລ້ວ ຊາວເລມັນກັບຊາວອາມລິໄຊເລີ່ມປົບໜີໄປ ກ່ອນ, ທັງໆທີ່ພວກເຂົາມີຄົນເປັນຈຳນວນຫລາຍກວ່າຈົນນັບບໍ່ ຖ້ວນ.

And it came to pass that when they had all crossed the river Sidon that the Lamanites and the Amlicites began to flee before them, notwithstanding they were so numerous that they could not be numbered.

ມ໕ຜ ແລະ ພວກເຂົາໄດ້ໜີໄປກ່ອນຊາວນີໄຟຈະມາຮອດ ມຸ້ງໜ້າ ເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ ຊຶ່ງຢູ່ທາງຕາເວັນຕົກ ແລະ ທາງເໜືອຊາຍແດນຂອງແຜ່ນດິນໄປ; ແລະ ຊາວນີໄຟໄດ້ໄລ່ ຕິດຕາມພວກເຂົາໄປດ້ວຍກຳລັງອັນມະຫາສານ ແລະ ໄດ້ຂ້າ ພວກເຂົາຖິ້ມ.

And they fled before the Nephites towards the wilderness which was west and north, away beyond the borders of the land; and the Nephites did pursue them with their might, and did slay them.

ມ໕໗ ແທ້ຈິງແລ້ວ, ພວກເຂົາຖືກອ້ອມໄວ້ທຸກດ້ານ, ແລະ ຖືກຂ້າ ຕາຍ, ແລະ ຖືກຂັບໄລ່ຈົນກະຈັດກະຈາຍໄປ ທາງຕາເວັນຕົກ ແລະ ທາງເໜືອຈົນເຖິງຖິ່ນແຫ້ງແລ້ງກັນດານ, ຊຶ່ງມີຊື່ວ່າ ເຮີ ເມ້ົາ; ແລະ ມັນເປັນສ່ວນໜຶ່ງຂອງຖິ່ນແຫ້ງແລ້ງກັນດານ ຊຶ່ງມີ ສັດປ່າ ແລະ ສັດຮ້າຍຫລາຍ.

Yea, they were met on every hand, and slain and driven, until they were scattered on the west, and on the north, until they had reached the wilderness, which was called Hermounts; and it was that part of the wilderness which was infested by wild and ravenous beasts.

ມ໕ຫ ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລາຍຄົນໄດ້ຕາຍໄປໃນຖິ່ນ ແຫ້ງແລ້ງກັນດານຍ້ອນບາດແຜຂອງຕົນ, ແລະ ຖືກສັດປ່າ ເຫລົ່ານັ້ນກິນຊາກສົບຂອງພວກເຂົາ, ແລະ ແຮ້ງໃນອາກາດກິນ ນຳອີກ; ແລະ ພົບກະດູກຂອງພວກເຂົາກອງຢູ່ທົ່ວແຜ່ນດິນ.

And it came to pass that many died in the wilderness of their wounds, and were devoured by those beasts and also the vultures of the air; and their bones have been found, and have been heaped up on the earth.

ແອວມາ ມ

ᄑᄑ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວນີໄຟຜູ້ທີ່ບໍ່ໄດ້ຖືກ ຂ້າຕາຍ ດ້ວຍອາວຸດແຫ່ງສົງຄາມ, ຫລັງຈາກໄດ້ຝັງສົບຜູ້ທີ່ຖືກຂ້າຕາຍ—ບັດນີ້ພວກເຂົາບໍ່ໄດ້ນັບຈຳນວນຄົນທີ່ຖືກຂ້າຕາຍ, ເພາະ ຄວາມຫລວງຫລາຍຂອງມັນ—ຫລັງຈາກພວກເຂົາໄດ້ຝັງສົບ ຂອງຜູ້ຕາຍຂອງພວກເຂົາຮຽບຮ້ອຍແລ້ວ ທຸກຄົນກໍໄດ້ກັບຄືນ ໄປຫາແຜ່ນດິນຂອງຕົນ, ແລະ ໄປຫາບ້ານເຮືອນຂອງຕົນ, ໄປ ຫາເມຍຂອງຕົນ, ແລະ ໄປຫາລູກຂອງຕົນ.

ᄒ ບັດນີ້ຜູ້ຍິງກັບເດັກນ້ອຍຫລາຍຄົນໄດ້ຖືກຂ້າຕາຍດ້ວຍດາບ, ແລະ ຝູງສັດລ້ຽງຂອງພວກເຂົາ ແລະ ຝູງສັດໃຊ້ແຮງງານຂອງ ພວກເຂົານຳອີກ; ແລະ ເຄື່ອງປູກຂອງຝັງໃນທົ່ງເປັນຈຳນວນ ຫລວງຫລາຍໄດ້ຖືກທຳລາຍຄືກັນ, ເພາະຖືກຜູ້ຄົນເປັນ ຈຳນວນຫລວງຫລາຍຢຽບຍ່ຳ.

ᄓ ແລະ ບັດນີ້ຊາວເລມັນກັບຊາວອາມລິໄຊຫລາຍຕໍ່ຫລາຍຄົນ ທີ່ຖືກຂ້າຕາຍຢູ່ແຄມແມ່ນ້ຳຊີโดนນັ້ນໄດ້ຖືກໂຍນລົງໃນ ນ້ຳ ຊີโดน; ແລະ ຈົ່ງເບິ່ງ ກະດູກຂອງພວກເຂົາຖືກຝັງຢູ່ໃນຄວາມ ເລິກຂອງ ທະເລ, ແລະ ມັນມີຢູ່ຢ່າງຫລວງຫລາຍ.

ᄔ ແລະ ຊາວອາມລິໄຊມີຄວາມແຕກຕ່າງຈາກຊາວນີໄຟ, ເພາະ ພວກເຂົາເຮັດ ເຄື່ອງໝາຍສີແດງໄວ້ທີ່ໜ້າຜາກຂອງພວກເຂົາ ຕາມແບບຢ່າງຂອງຊາວເລມັນ; ເຖິງຢ່າງໃດກໍຕາມ ພວກເຂົາບໍ່ ໄດ້ແຖຫົວຄືກັນກັບຊາວເລມັນ.

ᄕ ບັດນີ້ຫົວຂອງຊາວເລມັນບໍ່ມີຜົມ; ແລະ ພວກເຂົາ ເປືອຍໂຕ ນອກຈາກມີແຕ່ແຜ່ນໜັງຄຽນແອວ, ແລະ ເຄື່ອງປ້ອງກັນຕົວ ເກາະຫຸ້ມຫໍ່ຕົວໄວ້, ແລະ ຖືຄັນທະນູຂອງພວກເຂົາ, ແລະ ລູກທະນູຂອງພວກເຂົາ, ແລະ ກ້ອນຫີນຂອງພວກເຂົາ, ແລະ ກະຖຸນຂອງພວກເຂົາ, ແລະ ອື່ນໆ.

ᄖ ແລະ ຜິວໜັງຂອງຊາວເລມັນນັ້ນຄ້ຳ, ຊຶ່ງເປັນໄປຕາມ ເຄື່ອງໝາຍດັ່ງບັນພະບຸລຸດຂອງພວກເຂົາມີຕິດຕົວມາ, ເພາະ ມັນເປັນການ ສາບແຊ່ງໄວ້ຍ້ອນການລ່ວງລະເມີດຂອງພວກ ເຂົາ ແລະ ຍ້ອນການກະບົດຂອງພວກເຂົາຕໍ່ພີ່ນ້ອງຂອງພວກ ເຂົາເຊັ່ນ ນີໄຟ, ຢາໂຄບ, ແລະ ໂຢເຊັບ, ແລະ ແຊມ, ຜູ້ຊຶ່ງເປັນ ຄົນຊອບທຳ ແລະ ບໍລິສຸດ.

ᄗ ແລະ ພີ່ນ້ອງຂອງພວກເຂົາພະຍາຍາມຈະທຳລາຍພວກ ເຂົາ, ສະນັ້ນ ພວກເຂົາຈຶ່ງຖືກສາບແຊ່ງ ແລະ ອົງພຣະຜູ້ເປັນ ເຈົ້າໄດ້ຕິດ ເຄື່ອງໝາຍໄວ້ກັບພວກເຂົາ, ແທ້ຈິງແລ້ວ, ໄວ້ກັບເລ ມັນ ແລະ ເລມູເອນ, ແລະ ພວກລູກຊາຍຂອງອິດຊະມາເອນ, ແລະ ພວກຜູ້ຍິງຊາວອິດຊະມາເອນນຳອີກ.

Alma 3

And it came to pass that the Nephites who were not slain by the weapons of war, after having buried those who had been slain—now the number of the slain were not numbered, because of the greatness of their number—after they had finished burying their dead they all returned to their lands, and to their houses, and their wives, and their children.

Now many women and children had been slain with the sword, and also many of their flocks and their herds; and also many of their fields of grain were destroyed, for they were trodden down by the hosts of men.

And now as many of the Lamanites and the Amlicites who had been slain upon the bank of the river Sidon were cast into the waters of Sidon; and behold their bones are in the depths of the sea, and they are many.

And the Amlicites were distinguished from the Nephites, for they had marked themselves with red in their foreheads after the manner of the Lamanites; nevertheless they had not shorn their heads like unto the Lamanites.

Now the heads of the Lamanites were shorn; and they were naked, save it were skin which was girded about their loins, and also their armor, which was girded about them, and their bows, and their arrows, and their stones, and their slings, and so forth.

And the skins of the Lamanites were dark, according to the mark which was set upon their fathers, which was a curse upon them because of their transgression and their rebellion against their brethren, who consisted of Nephi, Jacob, and Joseph, and Sam, who were just and holy men.

And their brethren sought to destroy them, therefore they were cursed; and the Lord God set a mark upon them, yea, upon Laman and Lemuel, and also the sons of Ishmael, and Ishmaelitish women.

ຄ ແລະ ນີ້ເປັນໄປເພື່ອລູກຫລານຂອງພວກເຂົາຈະໄດ້ແຕກຕ່າງຈາກລູກຫລານຂອງພີ່ນ້ອງຂອງພວກເຂົາ, ເພື່ອແນວນີ້ອົງພຣະຜູ້ເປັນເຈົ້າຈະໄດ້ປົກປັກຮັກສາຜູ້ຄົນຂອງພຣະອົງ, ເພື່ອພວກເຂົາຈະບໍ່ ປະປົນ ແລະ ເຊື່ອຖືໃນ ຮີດຄອງປະເພນີອັນບໍ່ຖືກຕ້ອງ ຊຶ່ງຈະນຳຄວາມພິນາດມາສູ່ພວກເຂົາ.

ງ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ໃດກໍຕາມທີ່ປ່ອຍລູກຫລານຂອງຕົນໃຫ້ຮ່ວມສຳພັນກັບຊາວເລມັນ ພວກນັ້ນຈະໄດ້ນຳເອົາການສາບແຊ່ງແບບດຽວກັນມາສູ່ລູກຫລານຂອງຕົນ.

ຈ ສະນັ້ນ, ຜູ້ໃດກໍຕາມທີ່ຍອມຕົວໃຫ້ຊາວເລມັນຊັກນຳໄປ ພວກນັ້ນກໍຈະຖືກເອີ້ນຕາມພວກນັ້ນ, ແລະ ມີເຄື່ອງໝາຍຕິດຢູ່ກັບພວກເຂົາ.

ສ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ໃດກໍຕາມທີ່ບໍ່ຍອມເຊື່ອຖືໃນ ຮີດຄອງປະເພນີຂອງຊາວເລມັນ, ແຕ່ວ່າເຊື່ອຖືບັນທຶກເຫລົ່ານັ້ນ ຊຶ່ງຖືກນຳອອກຈາກແຜ່ນດິນເຢຣູຊາເລັມ, ແລະ ເຊື່ອຖືໃນຮີດຄອງປະເພນີຂອງບັນພະບຸລຸດຂອງພວກເຂົາຊຶ່ງຖືກຕ້ອງ, ຜູ້ທີ່ເຊື່ອໃນພຣະບັນຍັດຂອງພຣະເຈົ້າ ແລະ ໄດ້ຮັກສາມັນ, ຖືກເອີ້ນว່າ ຊາວນີໄຟ ຫລື ຜູ້ຄົນຂອງນີໄຟນັບແຕ່ເວລານັ້ນໄປ—

ຫ ແລະ ແມ່ນພວກເຂົາທີ່ໄດ້ຮັກສາບັນທຶກ ຊຶ່ງເປັນ ຄວາມຈິງຂອງຜູ້ຄົນຂອງພວກເຂົາ, ແລະ ຂອງຜູ້ຄົນຂອງຊາວເລມັນນຳອີກ.

ຫນ ບັດນີ້ພວກເຮົາຈະກັບມາເວົ້າເຖິງຊາວອາມລິໄຊ, ເພາະວ່າພວກເຂົາມີ ເຄື່ອງໝາຍຕິດຢູ່ກັບຕົວ; ແທ້ຈິງແລ້ວ, ເປັນເຄື່ອງໝາຍສີແດງເທິງໜ້າຜາກຂອງພວກເຂົາ.

ຫສ ພຣະຄຳຂອງພຣະເຈົ້າສຳເລັດແລ້ວ, ນີ້ຄືພຣະຄຳຊຶ່ງພຣະອົງໄດ້ກ່າວກັບນີໄຟວ່າ: ຈົ່ງເບິ່ງ, ເຮົາສາບແຊ່ງຊາວເລມັນໄວ້ແລ້ວ, ແລະ ເຮົາຈະຕິດເຄື່ອງໝາຍໄວ້ກັບພວກເຂົາເພື່ອພວກເຂົາກັບລູກຫລານຂອງພວກເຂົາຈະແຍກອອກຈາກເຈົ້າກັບລູກຫລານຂອງເຈົ້າ, ນັບແຕ່ເວລານີ້ເປັນຕົ້ນໄປ ແລະ ຕະຫລອດການ, ຖ້າຫາກພວກເຂົາບໍ່ກັບໃຈຈາກຄວາມຊົ່ວຮ້າຍຂອງພວກເຂົາ ແລະ ກັບມາຫາເຮົາເພື່ອເຮົາຈະມີຄວາມເມດຕາຕໍ່ພວກເຂົາ.

ສາມ ແລະ ອີກຢ່າງໜຶ່ງ: ເຮົາຈະຕິດເຄື່ອງໝາຍໄວ້ກັບຜູ້ທີ່ປ່ອຍລູກຫລານຂອງຕົນໃຫ້ຮ່ວມສຳພັນກັບພີ່ນ້ອງຂອງເຈົ້າ ເພື່ອພວກເຂົາຈະໄດ້ຖືກສາບແຊ່ງນຳກັນ.

ສີ່ ແລະ ອີກຢ່າງໜຶ່ງ: ເຮົາຈະຕິດເຄື່ອງໝາຍໄວ້ກັບຜູ້ທີ່ຕໍ່ສູ້ກັບເຈົ້າ ແລະ ລູກຫລານຂອງເຈົ້າ.

And this was done that their seed might be distinguished from the seed of their brethren, that thereby the Lord God might preserve his people, that they might not mix and believe in incorrect traditions which would prove their destruction.

And it came to pass that whosoever did mingle his seed with that of the Lamanites did bring the same curse upon his seed.

Therefore, whosoever suffered himself to be led away by the Lamanites was called under that head, and there was a mark set upon him.

And it came to pass that whosoever would not believe in the tradition of the Lamanites, but believed those records which were brought out of the land of Jerusalem, and also in the tradition of their fathers, which were correct, who believed in the commandments of God and kept them, were called the Nephites, or the people of Nephi, from that time forth—

And it is they who have kept the records which are true of their people, and also of the people of the Lamanites.

Now we will return again to the Amlicites, for they also had a mark set upon them; yea, they set the mark upon themselves, yea, even a mark of red upon their foreheads.

Thus the word of God is fulfilled, for these are the words which he said to Nephi: Behold, the Lamanites have I cursed, and I will set a mark on them that they and their seed may be separated from thee and thy seed, from this time henceforth and forever, except they repent of their wickedness and turn to me that I may have mercy upon them.

And again: I will set a mark upon him that mingleth his seed with thy brethren, that they may be cursed also.

And again: I will set a mark upon him that fighteth against thee and thy seed.

ແລະ ອີກຢ່າງໜຶ່ງ, ເຮົາກ່າວว່າ ຈະບໍ່ເອີ້ນຜູ້ທີ່ໜີໄປຈາກເຈົ້າ ว່າເປັນລູກຫລານຂອງເຈົ້າອີກຕໍ່ໄປ; ແລະ ເຮົາຈະໃຫ້ພອນແກ່ ເຈົ້າກັບຜູ້ທີ່ຖືກເອີ້ນว່າເປັນລູກຫລານຂອງເຈົ້າ, ນັບແຕ່ເວລານີ້ ເປັນຕົ້ນໄປ ແລະ ຕະຫລອດການ, ແລະ ນີ້ຄືຄຳສັນຍາຂອງພຣະ ຜູ້ເປັນເຈົ້າທີ່ປະທານໃຫ້ແກ່ນີໄຟກັບລູກຫລານຂອງເພີ່ນ.

And again, I say he that departeth from thee shall no more be called thy seed; and I will bless thee, and whomsoever shall be called thy seed, henceforth and forever; and these were the promises of the Lord unto Nephi and to his seed.

ບັດນີ້ຊາວອາມລິໄຊບໍ່ຮູ້ຈັກເລີຍว່າ ພວກເຂົາກຳລັງເຮັດໃຫ້ ພຣະຄຳຂອງພຣະເຈົ້າສຳເລັດ ເມື່ອພວກເຂົາ ເລີ່ມເຮັດ ເຄື່ອງໝາຍໃຫ້ຕົນເອງໄວ້ເທິງໜ້າຜາກຂອງພວກເຂົາ; ເຖິງ ຢ່າງໃດກໍຕາມ ພວກເຂົາຍັງໄດ້ອອກມາໃນ ການກະບົດຕໍ່ ພຣະເຈົ້າຢ່າງເປີດເຜີຍ; ສະນັ້ນ ມັນສົມຄວນແລ້ວທີ່ການ ສາບແຊ່ງຈະຕົກຢູ່ກັບພວກເຂົາ.

Now the Amlicites knew not that they were fulfilling the words of God when they began to mark themselves in their foreheads; nevertheless they had come out in open rebellion against God; therefore it was expedient that the curse should fall upon them.

ບັດນີ້ຂ້າພະເຈົ້າຢາກໃຫ້ທ່ານເຫັນว່າ ພວກເຂົານຳເອົາ ການ ສາບແຊ່ງມາສູ່ຕົວຂອງພວກເຂົາເອງ; ແລະ ຈົນກະທັ້ງທຸກໆ ຄົນທີ່ຖືກສາບແຊ່ງກໍຈະນຳເອົາການກ່າວໂທດມາສູ່ຕົນເອງ.

Now I would that ye should see that they brought upon themselves the curse; and even so doth every man that is cursed bring upon himself his own condemnation.

ແລະ ເຫດການໄດ້ບັງເກີດຂຶ້ນຄື ຕໍ່ມາອີກບໍ່ຫລາຍມື້ ຫລັງຈາກການສູ້ຮົບໄດ້ເກີດຂຶ້ນ ໃນແຜ່ນດິນເຊຣາເຮັມລາ, ໂດຍຊາວເລມັນ ແລະ ຊາວອາມລິໄຊ, ໄດ້ມີກອງທັບອີກກອງ ໜຶ່ງຂອງຊາວເລມັນຍົກມາໂຈມຕີຜູ້ຄົນຂອງນີໄຟ, ໃນບ່ອນ ດຽວກັນກັບບ່ອນກອງທັບທຳອິດຂອງພວກເຂົາພົບກັບຊາວ ອາມລິໄຊນັ້ນ.

Now it came to pass that not many days after the battle which was fought in the land of Zarahemla, by the Lamanites and the Amlicites, that there was another army of the Lamanites came in upon the people of Nephi, in the same place where the first army met the Amlicites.

ແລະ ເຫດການໄດ້ບັງເກີດຂຶ້ນຄື ມີກອງທັບກອງໜຶ່ງໄດ້ຖືກ ສົ່ງອອກໄປເພື່ອຂັບໄລ່ກອງທັບພວກເຂົາອອກຈາກແຜ່ນດິນ ຂອງພວກເຂົາ.

And it came to pass that there was an army sent to drive them out of their land.

ບັດນີ້ຕົວແອວມາເອງໂດຍທີ່ເປັນທຸກນຳການໄດ້ຮັບ ບາດ ເຈັບ ຈຶ່ງບໍ່ໄດ້ອອກໄປສູ້ຮົບກັບຊາວເລມັນໃນເທື່ອນີ້;

Now Alma himself being afflicted with a wound did not go up to battle at this time against the Lamanites;

ແຕ່ເພີ່ນໄດ້ສົ່ງກອງທັບໃຫຍ່ອອກໄປຕໍ່ສູ້ກັບພວກເຂົາ; ແລະ ກອງທັບຂອງເພີ່ນໄດ້ໄປຂ້າຊາວເລມັນເປັນຈຳນວນ ຫລວງຫລາຍ, ແລະ ໄດ້ຂັບໄລ່ພວກທີ່ເຫລືອຕາຍອອກໄປຈາກ ຊາຍແດນຂອງແຜ່ນດິນຂອງພວກເຂົາ.

But he sent up a numerous army against them; and they went up and slew many of the Lamanites, and drove the remainder of them out of the borders of their land.

ແລ້ວກອງທັບຂອງພວກນີ້ກໍໄດ້ກັບຄືນມາ ແລະ ເລີ່ມ ສະຖາປະນາສັນຕິສຸກຂຶ້ນໃນແຜ່ນດິນ, ໂດຍບໍ່ມີສັດຕູມາ ລົບກວນອີກຕໍ່ໄປຊົ່ວໄລຍະໜຶ່ງ.

And then they returned again and began to establish peace in the land, being troubled no more for a time with their enemies.

ບັດນີ້ສິ່ງທັງໝົດນີ້ຜ່ານໄປ, ແທ້ຈິງແລ້ວ, ສົງຄາມ ແລະ ການຂັດແຍ້ງກັນເລີ່ມຂຶ້ນ ແລະ ສິ້ນສຸດລົງໃນປີທີຫ້າແຫ່ງການ ປົກຄອງຂອງຜູ້ຕັດສິນ.

Now all these things were done, yea, all these wars and contentions were commenced and ended in the fifth year of the reign of the judges.

ຄ.ຜ ແລະ ພາຍໃນໜຶ່ງປີ ຄົນເປັນພັນໆ ແລະ ເປັນໝື່ນໆໄດ້ຖືກ
ສົ່ງໄປສູ່ໂລກຊົ່ວນິລັນດອນ ເພື່ອພວກເຂົາຈະໄດ້ຮັບ ລາງວັນ
ຂອງພວກເຂົາຕາມວຽກງານຂອງພວກເຂົາ ບໍ່ວ່າພວກເຂົາຈະ
ດີ ຫລື ຈະຊົ່ວ, ເພື່ອເກັບກ່ຽວເອົາຄວາມຜາສຸກຊົ່ວນິລັນດອນ
ຫລື ເກັບກ່ຽວເອົາຄວາມທຸກທໍລະມານຊົ່ວນິລັນດອນ, ອັນເປັນ
ໄປຕາມວິນຍານຊຶ່ງພວກເຂົາໄດ້ເລືອກເຊື່ອຟັງ, ບໍ່ວ່າຈະເປັນ
ວິນຍານດີ ຫລື ວິນຍານຊົ່ວ.

ຄ.ກ ເພາະທຸກຄົນຍ່ອມໄດ້ຮັບ ຄ່າຈ້າງຈາກຄົນຜູ້ທີ່ຕົນເລືອກ
ເຊື່ອຟັງ, ແລະ ນີ້ເປັນໄປຕາມຄຳເວົ້າຂອງວິນຍານແຫ່ງການ
ທຳນາຍ; ສະນັ້ນຂໍໃຫ້ເປັນໄປຕາມຄວາມຈິງ. ແລະ ປີທີຫ້າ
ແຫ່ງການປົກຄອງຂອງຜູ້ຕັດສິນກໍໄດ້ສິ້ນສຸດລົງດັ່ງນີ້.

And in one year were thousands and tens of thousands of souls sent to the eternal world, that they might reap their rewards according to their works, whether they were good or whether they were bad, to reap eternal happiness or eternal misery, according to the spirit which they listed to obey, whether it be a good spirit or a bad one.

For every man receiveth wages of him whom he listeth to obey, and this according to the words of the spirit of prophecy; therefore let it be according to the truth. And thus endeth the fifth year of the reign of the judges.

ແອວມາ ๔

๑ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນປີທີຫົກແຫ່ງການປົກຄອງ
ຂອງຜູ້ຕັດສິນຜູ້ຄົນຂອງນີໄຟ, ມັນບໍ່ມີການຂັດແຍ້ງ ຫລື
ສົງຄາມໃນ ແຜ່ນດິນເຊຣາເຮັມລາເລີຍ;

๒ ແຕ່ວ່າຜູ້ຄົນໄດ້ຮັບຄວາມເປັນທຸກ, ແທ້ຈິງແລ້ວ, ແມ່ນ
ເປັນທຸກຢ່າງແສນສາຫັດ ເພາະວ່າ ການລົ້ມຕາຍຂອງພີ່ນ້ອງ
ຂອງພວກເຂົາ, ແລະ ເພາະການສູນເສຍຝູງສັດລ້ຽງຂອງພວກ
ເຂົາ ແລະ ຝູງສັດໃຊ້ແຮງງານຂອງພວກເຂົານຳອີກ, ແລະ
ເພາະວ່າການສູນເສຍເຄື່ອງປູກຂອງຝັງໃນທົ່ງຂອງພວກເຂົາ
ຊຶ່ງຖືກຊາວເລມັນຢຽບຍ່ຳໄວ້ໃຕ້ພື້ນດິນ ແລະ ທຳລາຍຈົນໝົດ.

๓ ແລະ ຄວາມທຸກຂອງພວກເຂົານັ້ນແສນສາຫັດຈົນວ່າທຸກ
ຄົນຕ້ອງເປັນທຸກ; ແລະ ພວກເຂົາເຊື່ອວ່າມັນເປັນຈາກການ
ພິພາກສາຂອງພຣະເຈົ້າ ຊຶ່ງສົ່ງມາຫາພວກເຂົາ ເພາະວ່າ
ຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງພວກເຂົາ; ສະນັ້ນ
ພວກເຂົາຈຶ່ງໄດ້ຖືກປຸກໃຫ້ຕື່ນຂຶ້ນຫາຄວາມຊົງຈຳເຖິງໜ້າທີ່
ຂອງພວກເຂົາ.

๔ ແລະ ພວກເຂົາໄດ້ເລີ່ມຕົ້ນສະຖາປະນາສາດສະໜາຈັກໃຫ້
ສົມບູນຂຶ້ນ; ແທ້ຈິງແລ້ວ, ຫລາຍຄົນໄດ້ຮັບ ບັບຕິສະມາໃນແມ່
ນ້ຳຊີໂດນ ແລະ ໄດ້ເຂົ້າຮ່ວມສາດສະໜາຈັກຂອງພຣະເຈົ້າ; ແທ້
ຈິງແລ້ວ, ພວກເຂົາໄດ້ຮັບບັບຕິສະມາໂດຍມືຂອງແອວມາ, ຜູ້
ຖືກແຕ່ງຕັ້ງໃຫ້ເປັນ ມະຫາປະໂລຫິດດ້ວຍມືຂອງແອວມາຜູ້
ເປັນບິດາຂອງເພີ່ນ ເພື່ອເບິ່ງແຍງຜູ້ຄົນໃນສາດສະໜາຈັກ.

๕ ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີເຈັດແຫ່ງການປົກຄອງ
ຂອງຜູ້ຕັດສິນ ໄດ້ມີຄົນປະມານສາມພັນຫ້າຮ້ອຍຄົນທີ່ໄດ້
ເຂົ້າຮ່ວມ ສາດສະໜາຈັກຂອງພຣະເຈົ້າ ແລະ ໄດ້ຮັບ
ບັບຕິສະມາ. ແລະ ປີທີເຈັດແຫ່ງການປົກຄອງຜູ້ຄົນຂອງນີໄຟ
ຂອງຜູ້ຕັດສິນໄດ້ສິ້ນສຸດລົງດັ່ງນີ້; ແລະ ມີສັນຕິສຸກຕິດຕໍ່ກັນ
ຕະຫລອດເວລານັ້ນ.

๖ ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີແປດແຫ່ງການ
ປົກຄອງຂອງຜູ້ຕັດສິນ, ຄືປະຊາຊົນເລີ່ມອວດດີຂຶ້ນ ເພາະ
ຄວາມຮັ່ງມີຂອງພວກເຂົາ, ແລະ ເພາະຜ້າໄໝ ແນວດີຂອງ
ພວກເຂົາ, ແລະ ຜ້າລີນິນຕ່ຳຢ່າງດີຂອງພວກເຂົາ, ແລະ ເພາະ
ຝູງສັດລ້ຽງ ແລະ ຝູງສັດໃຊ້ແຮງງານຢ່າງຫລວງຫລາຍຂອງ
ພວກເຂົາ, ແລະ ເພາະຄຳຂອງພວກເຂົາ ແລະ ເງິນຂອງພວກ
ເຂົາ, ແລະ ສິ່ງຂອງມີຄ່ານາໆຊະນິດຊຶ່ງພວກເຂົາໄດ້ມາຈາກ
ການອຸດສາຫະກຳຂອງພວກເຂົາ; ແລະ ດ້ວຍສິ່ງທັງໝົດນີ້
ພວກເຂົາຈຶ່ງລະເມີເພີ້ຝັນດ້ວຍຄວາມທະນົງຕົວໃນສາຍຕາ
ຂອງຕົນເອງ, ເພາະພວກເຂົາເລີ່ມໃສ່ເສື້ອຜ້າທີ່ມີລາຄາແພງ.

Alma 4

Now it came to pass in the sixth year of the reign of the judges over the people of Nephi, there were no contentions nor wars in the land of Zarahemla;

But the people were afflicted, yea, greatly afflicted for the loss of their brethren, and also for the loss of their flocks and herds, and also for the loss of their fields of grain, which were trodden under foot and destroyed by the Lamanites.

And so great were their afflictions that every soul had cause to mourn; and they believed that it was the judgments of God sent upon them because of their wickedness and their abominations; therefore they were awakened to a remembrance of their duty.

And they began to establish the church more fully; yea, and many were baptized in the waters of Sidon and were joined to the church of God; yea, they were baptized by the hand of Alma, who had been consecrated the high priest over the people of the church, by the hand of his father Alma.

And it came to pass in the seventh year of the reign of the judges there were about three thousand five hundred souls that united themselves to the church of God and were baptized. And thus ended the seventh year of the reign of the judges over the people of Nephi; and there was continual peace in all that time.

And it came to pass in the eighth year of the reign of the judges, that the people of the church began to wax proud, because of their exceeding riches, and their fine silks, and their fine-twined linen, and because of their many flocks and herds, and their gold and their silver, and all manner of precious things, which they had obtained by their industry; and in all these things were they lifted up in the pride of their eyes, for they began to wear very costly apparel.

ກ ບັດນີ້ມັນເປັນເຫດໃຫ້ແອວມາມີຄວາມທຸກທລາຍ, ແທ້ຈິງ ແລ້ວ, ແລະ ຕໍ່ຫລາຍຄົນທີ່ແອວມາໄດ້ ແຕ່ງຕັ້ງໃຫ້ເປັນຜູ້ສອນ, ແລະ ເປັນປະໂລຫິດ, ແລະ ເປັນແອວເດີເພື່ອດູແລສາດສະໜາ ຈັກ; ແທ້ຈິງແລ້ວ ຄົນຢ່າງຫລວງຫລາຍໃນພວກເຂົາໂສກເສົ້າ ເພາະຄວາມຊົ່ວຮ້າຍທີ່ພວກເຂົາເຫັນ ແລະ ມັນກຳລັງເລີ່ມ ເກີດຂຶ້ນໃນບັນດາຜູ້ຄົນຂອງພວກເຂົາ.

ຊ ເພາະວ່າພວກເຂົາໄດ້ເຫັນ ແລະ ໄດ້ເບິ່ງດ້ວຍຄວາມເສົ້າ ສະຫລົດໃຈ ວ່າຜູ້ຄົນຂອງສາດສະໜາຈັກເລີ່ມລະເມີເພີ້ຝັນ ດ້ວຍ ຄວາມທະນົງຕົວໃນສາຍຕາຂອງຕົນເອງ, ແລະ ໝົກໝຸ້ນ ຢູ່ກັບຂອງມີຄ່າ ແລະ ກັບສິ່ງທີ່ບໍ່ມີປະໂຫຍດຂອງໂລກ, ຈົນວ່າ ພວກເຂົາໄດ້ໝິ່ນປະໝາດຊຶ່ງກັນແລະກັນ, ແລະ ພວກເຂົາເລີ່ມ ກົດຂີ່ຂົ່ມເຫັງຜູ້ທີ່ ບໍ່ເຊື່ອໃນຄວາມປາດຖະໜາ ຫລື ຄວາມພໍໃຈ ຂອງພວກເຂົາ.

ຊ ແລະ ໃນປີທີແປດແຫ່ງການປົກຄອງຂອງຜູ້ຕັດສິນ, ມັນ ເລີ່ມມີ ການຂັດແຍ້ງກັນຢ່າງໃຫຍ່ຫລວງໃນບັນດາຜູ້ຄົນຂອງ ສາດສະໜາຈັກດັ່ງນີ້; ແທ້ຈິງແລ້ວ, ມີ ການອິດສາບັງບຽດ, ແລະ ການຜິດຖຽງກັນ, ແລະ ເຈດຕະນາຮ້າຍ, ແລະ ຂົ່ມເຫັງ, ແລະ ຄວາມທະນົງຕົວ, ເຖິງຂະໜາດທີ່ກັບມາຫລາຍກວ່າ ຄວາມທະນົງຕົວຂອງຜູ້ທີ່ບໍ່ໄດ້ເປັນສະມາຊິກຂອງສາດສະໜາ ຈັກຂອງພຣະເຈົ້າຊ້ຳອີກ.

ຊ ແລະ ປີທີແປດແຫ່ງການປົກຄອງຂອງຜູ້ຕັດສິນໄດ້ສິ້ນສຸດ ລົງດັ່ງນີ້; ແລະ ຄວາມຊົ່ວຮ້າຍຂອງຜູ້ຄົນຂອງສາດສະໜາຈັກ ເປັນສິ່ງທີ່ເຮັດໃຫ້ສະດຸດອັນໃຫຍ່ຫລວງແກ່ຜູ້ທີ່ບໍ່ເປັນຂອງ ສາດສະໜາຈັກ; ແລະ ສາດສະໜາຈັກເລີ່ມເສື່ອມໂຊມລົງຕາມ ຄວາມກ້າວໜ້າຂອງສິ່ງທີ່ບໍ່ດີດັ່ງນີ້.

ຊ ແລະ ເຫດການໄດ້ບັງເກີດຂຶ້ນໃນຕົ້ນປີທີເກົ້າ, ແອວມາໄດ້ ເຫັນຄວາມຊົ່ວຮ້າຍຂອງສາດສະໜາຈັກ ແລະ ເພີ່ນເຫັນອີກວ່າ ຕົວຢ່າງຂອງສາດສະໜາຈັກເລີ່ມພາຜູ້ຄົນທີ່ບໍ່ເຊື່ອເຮັດຄວາມ ຊົ່ວຮ້າຍຈາກຢ່າງໜຶ່ງຫາອີກຢ່າງໜຶ່ງ, ນັ້ນເປັນການນຳຄວາມ ພິນາດມາສູ່ຜູ້ຄົນ.

ຊ ແທ້ຈິງແລ້ວ, ເພີ່ນໄດ້ເຫັນຄວາມບໍ່ສະເໝີພາບຫລາຍຢ່າງ ໃນບັນດາຜູ້ຄົນ, ບາງຄົນເພີ້ຝັນດ້ວຍຄວາມທະນົງຕົວ, ໝິ່ນ ປະໝາດຄົນອື່ນ, ຫັນຫລັງໃສ່ ຄົນຂັດສົນ ແລະ ຄົນທີ່ເປືອຍ ເປົ່າ ແລະ ຄົນຫິວໂຫຍ, ແລະ ຄົນທີ່ກະຫາຍ, ແລະ ຄົນເຈັບ ປ່ວຍ ແລະ ເປັນທຸກ.

Now this was the cause of much affliction to Alma, yea, and to many of the people whom Alma had consecrated to be teachers, and priests, and elders over the church; yea, many of them were sorely grieved for the wickedness which they saw had begun to be among their people.

For they saw and beheld with great sorrow that the people of the church began to be lifted up in the pride of their eyes, and to set their hearts upon riches and upon the vain things of the world, that they began to be scornful, one towards another, and they began to persecute those that did not believe according to their own will and pleasure.

And thus, in this eighth year of the reign of the judges, there began to be great contentions among the people of the church; yea, there were envyings, and strife, and malice, and persecutions, and pride, even to exceed the pride of those who did not belong to the church of God.

And thus ended the eighth year of the reign of the judges; and the wickedness of the church was a great stumbling-block to those who did not belong to the church; and thus the church began to fail in its progress.

And it came to pass in the commencement of the ninth year, Alma saw the wickedness of the church, and he saw also that the example of the church began to lead those who were unbelievers on from one piece of iniquity to another, thus bringing on the destruction of the people.

Yea, he saw great inequality among the people, some lifting themselves up with their pride, despising others, turning their backs upon the needy and the naked and those who were hungry, and those who were athirst, and those who were sick and afflicted.

ບັດນີ້ມັນເປັນຕົ້ນເຫດ ແລະ ສ້າງການຄ່ຳຄວນໃນບັນດາ
ຜູ້ຄົນ, ຂະນະທີ່ຄົນອື່ນໆກຳລັງຖ່ອມຕົວ, ກຳລັງຊ່ວຍເຫລືອຄົນ
ທີ່ຕ້ອງການຄວາມຊ່ວຍເຫລືອ, ເປັນຕົ້ນ ການໃຫ້ເຂົ້າຂອງແກ່
ຄົນຍາກຈົນ ແລະ ຄົນຂັດສົນ, ໃຫ້ອາຫານແກ່ຄົນທີ່ຫິວໂຫຍ,
ແລະ ທົນຕໍ່ ຄວາມທຸກນາໆປະການ ເພື່ອເຫັນແກ່ພຣະຄຣິດຜູ້
ຈະສະເດັດມາຕາມວິນຍານແຫ່ງການທຳນາຍ;

ໂດຍການຄອຍຫາມື້ນັ້ນ, ໂດຍ ການຮັກສາການປົດບາບ
ຂອງພວກເຂົາໄວ້, ໂດຍເຕັມໄປດ້ວຍ ຄວາມຊື່ນຊົມອັນຍິ່ງໃຫຍ່
ເພາະການຟື້ນຄືນຊີວິດຂອງຄົນຕາຍຕາມພຣະປະສົງ ແລະ
ອຳນາດ ແລະ ການປົດປ່ອຍຂອງພຣະເຢຊູຄຣິດຈາກສາຍຮັດ
ແຫ່ງຄວາມຕາຍ.

ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ແອວມາ, ໂດຍທີ່ໄດ້
ເຫັນຄວາມທຸກຂອງຜູ້ຕິດຕາມທີ່ຖ່ອມຕົວຂອງພຣະເຈົ້າ, ແລະ
ການຂົ່ມເຫັງຊຶ່ງກອງຂຶ້ນກັບຄົນເຫລົ່ານັ້ນໂດຍຜູ້ຄົນຂອງເພີ່ນ
ທີ່ເຫລືອຢູ່, ແລະ ຄວາມບໍ່ສະເໝີພາບທຸກຢ່າງຂອງພວກເຂົາ,
ຈຶ່ງເລີ່ມມີຄວາມເສົ້າສະຫລົດໃຈທີ່ສຸດ; ເຖິງຢ່າງໃດກໍຕາມ
ພຣະວິນຍານຂອງພຣະຜູ້ເປັນເຈົ້າບໍ່ໄດ້ເຮັດໃຫ້ເພີ່ນຜິດຫວັງ
ເລີຍ.

ແລະ ເພີ່ນໄດ້ເລືອກເອົາຄົນທີ່ສະຫລາດຜູ້ໜຶ່ງໃນບັນດາ
ແອວເດີຂອງສາດສະໜາຈັກ, ແລະ ໃຫ້ອຳນາດແກ່ເພີ່ນຕາມ
ສຽງຂອງຜູ້ຄົນ, ເພື່ອເພີ່ນຈະໄດ້ມີອຳນາດອອກ ກົດຕາມ
ກົດໝາຍທີ່ມີໄວ້, ແລະ ໃຊ້ບັງຄັບຄວາມຊົ່ວຮ້າຍ ແລະ ຄວາມ
ຜິດຂອງຜູ້ຄົນ.

ບັດນີ້ຊື່ຂອງຊາຍຄົນນັ້ນແມ່ນ ນີໄຟຮາ, ແລະ ເພີ່ນໄດ້ຖືກ
ແຕ່ງຕັ້ງໃຫ້ເປັນ ຫົວໜ້າຜູ້ຕັດສິນ; ແລະ ເພີ່ນໄດ້ນັ່ງຢູ່ເທິງ
ບັນລັງຕັດສິນເພື່ອຕັດສິນ ແລະ ເພື່ອປົກຄອງຜູ້ຄົນ.

ບັດນີ້ແອວມາບໍ່ໄດ້ມອບຕຳແໜ່ງມະຫາປະໂລຫິດເພື່ອດູແລ
ສາດສະໜາຈັກໃຫ້ແກ່ເພີ່ນ, ແຕ່ເພີ່ນໄດ້ຮັກສາຕຳແໜ່ງມະຫາ
ປະໂລຫິດໄວ້ໃຫ້ຕົນເອງ; ເພີ່ນພຽງແຕ່ມອບບັນລັງຕັດສິນໃຫ້
ແກ່ນີໄຟຮາ ເທົ່ານັ້ນ.

ແລະ ເພີ່ນເຮັດສິ່ງນີ້ເພື່ອວ່າ ຕົນເອງຈະໄດ້ອອກໄປໃນບັນດາ
ຜູ້ຄົນຂອງເພີ່ນ ຫລື ໃນບັນດາຜູ້ຄົນຂອງນີໄຟ, ເພື່ອເພີ່ນຈະໄດ້
ສັ່ງສອນ ພຣະຄຳຂອງພຣະເຈົ້າແກ່ພວກເຂົາເພື່ອ ກະຕຸ້ນພວກ
ເຂົາໃຫ້ ສຳນຶກເຖິງໜ້າທີ່ຂອງພວກເຂົາ, ແລະ ໂດຍພຣະຄຳ
ຂອງພຣະເຈົ້າ, ເພີ່ນຈະໄດ້ດຶງເອົາຄວາມທະນົງຕົວ ແລະ
ກົນອຸບາຍທັງໝົດ ແລະ ການຂັດແຍ້ງທັງໝົດ ຊຶ່ງມີຢູ່ໃນ
ບັນດາຜູ້ຄົນຂອງເພີ່ນລົງມາ, ໂດຍບໍ່ເຫັນທາງອື່ນແລ້ວທີ່ເພີ່ນ
ຈະກູ້ພວກເຂົາກັບຄືນ ນອກຈາກເພີ່ນຈະພະຍາຍາມຢ່າງ
ເຕັມທີ່ດ້ວຍ ປະຈັກພະຍານອັນບໍລິສຸດເພື່ອຕຳນິພວກເຂົາ.

Now this was a great cause for lamentations among the people, while others were abasing themselves, succoring those who stood in need of their succor, such as imparting their substance to the poor and the needy, feeding the hungry, and suffering all manner of afflictions, for Christ's sake, who should come according to the spirit of prophecy;

Looking forward to that day, thus retaining a remission of their sins; being filled with great joy because of the resurrection of the dead, according to the will and power and deliverance of Jesus Christ from the bands of death.

And now it came to pass that Alma, having seen the afflictions of the humble followers of God, and the persecutions which were heaped upon them by the remainder of his people, and seeing all their inequality, began to be very sorrowful; nevertheless the Spirit of the Lord did not fail him.

And he selected a wise man who was among the elders of the church, and gave him power according to the voice of the people, that he might have power to enact laws according to the laws which had been given, and to put them in force according to the wickedness and the crimes of the people.

Now this man's name was Nephihah, and he was appointed chief judge; and he sat in the judgment-seat to judge and to govern the people.

Now Alma did not grant unto him the office of being high priest over the church, but he retained the office of high priest unto himself; but he delivered the judgment-seat unto Nephihah.

And this he did that he himself might go forth among his people, or among the people of Nephi, that he might preach the word of God unto them, to stir them up in remembrance of their duty, and that he might pull down, by the word of God, all the pride and craftiness and all the contentions which were among his people, seeing no way that he might reclaim them save it were in bearing down in pure testimony against them.

ແລະ ດັ່ງນີ້ ໃນຕົ້ນປີທີເກົ້າແຫ່ງການປົກຄອງຂອງຜູ້ຕັດສິນ ຄູແລຜູ້ຄົນຂອງນີໄຟ, ແອວມາຈຶ່ງໄດ້ມອບບັນລັງຕັດສິນໃຫ້ ນີ ໄຟຮາ, ແລະ ເພີ່ນຈະປະຕິບັດຕົນສະເພາະແຕ່ໃນ ຖານະ ປະໂລຫິດສູງເທົ່ານັ້ນ ແຫ່ງລະບຽບອັນສັກສິດຂອງພຣະເຈົ້າ, ໃນການເປັນພະຍານເຖິງພຣະຄຳຕາມພຣະວິນຍານແຫ່ງການ ເປີດເຜີຍ ແລະ ການທຳນາຍ.

And thus in the commencement of the ninth year of the reign of the judges over the people of Nephi, Alma delivered up the judgment-seat to Nephihah, and confined himself wholly to the high priesthood of the holy order of God, to the testimony of the word, according to the spirit of revelation and prophecy.

ຄຳເວົ້າຂອງແອວມາຜູ້ເປັນມະຫາປະໂລຫິດຕາມລະບຽບອັນສັກສິດຂອງພຣະເຈົ້າໄດ້ປະກາດຕໍ່ຜູ້ຄົນຢູ່ໃນເມືອງ ແລະ ໝູ່ບ້ານຕ່າງໆທົ່ວແຜ່ນດິນ.

ແອວມາ ๕

๑ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ແອວມາເລີ່ມ ປະກາດພຣະຄຳ ຂອງ ພຣະເຈົ້າແກ່ຜູ້ຄົນ, ທຳອິດຢູ່ໃນແຜ່ນດິນເຊຣາເຮັມລາ, ແລະ ຫລັງຈາກນັ້ນໄປຕະຫລອດທົ່ວແຜ່ນດິນ.

๒ ແລະ ນີ້ຄືຄຳຊຶ່ງແອວມາໄດ້ເວົ້າກັບຜູ້ຄົນໃນສາດສະໜາຈັກ ຊຶ່ງສະຖາປະນາຂຶ້ນຢູ່ໃນເມືອງເຊຣາເຮັມລາ, ຕາມບັນທຶກຂອງ ເພີ່ນເອງ, ມີຄວາມວ່າ:

๓ ຂ້າພະເຈົ້າແອວມາໄດ້ຮັບ ແຕ່ງຕັ້ງໂດຍແອວມາບິດາຂອງ ຂ້າພະເຈົ້າໃຫ້ເປັນ ມະຫາປະໂລຫິດດູແລສາດສະໜາຈັກຂອງ ພຣະເຈົ້າ, ໂດຍທີ່ເພີ່ນມີອຳນາດ ແລະ ສິດອຳນາດຈາກພຣະເຈົ້າ ຊຶ່ງໃຫ້ເຮັດວຽກງານເຫລົ່ານີ້, ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບ ພວກທ່ານວ່າ ເພີ່ນໄດ້ເລີ່ມຕົ້ນສະຖາປະນາສາດສະໜາຈັກໃນ ແຜ່ນດິນ ຊຶ່ງຢູ່ໃນຊາຍແດນນີໄຟ; ແທ້ຈິງແລ້ວ, ແຜ່ນດິນທີ່ມີຊື່ ວ່າແຜ່ນດິນມໍມອນ; ແທ້ຈິງແລ້ວ, ເພີ່ນໄດ້ໃຫ້ບັບຕິສະມາແກ່ ພີ່ນ້ອງຂອງເພີ່ນໃນນ້ຳມໍມອນ.

๔ ແລະ ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ເຂົາເຈົ້າຖືກ ປົດປ່ອຍໃຫ້ພົ້ນຈາກກຳມືຂອງຜູ້ຄົນຂອງກະສັດໂນອາໂດຍ ພຣະເມດຕາ ແລະ ອຳນາດຂອງພຣະເຈົ້າ.

๕ ແລະ ຈົ່ງເບິ່ງ, ຫລັງຈາກນັ້ນເຂົາເຈົ້າຖືກນຳໄປສູ່ ຄວາມເປັນ ທາດໃນຖິ່ນແຫ້ງແລ້ງກັນດານດ້ວຍມືຂອງຊາວເລມັນ; ແທ້ຈິງ ແລ້ວ, ຂ້າພະເຈົ້າກ່າວກັບພວກທ່ານວ່າ, ເຂົາເຈົ້າຢູ່ໃນຄວາມ ເປັນຊະເລີຍ, ແລະ ພຣະຜູ້ເປັນເຈົ້າໄດ້ປົດປ່ອຍເຂົາເຈົ້າອອກ ຈາກ ຄວາມເປັນທາດອີກໂດຍອຳນາດຂອງພຣະຄຳຂອງ ພຣະອົງ, ແລະ ພວກເຮົາຈົ່ງຖືກນຳມາຫາແຜ່ນດິນນີ້, ແລະ ໃນ ບ່ອນນີ້ຊຶ່ງພວກເຮົາເລີ່ມສະຖະປະນາສາດສະໜາຈັກຂອງ ພຣະເຈົ້າຂຶ້ນທົ່ວແຜ່ນດິນນຳອີກ.

๖ ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານພີ່ນ້ອງ ຂອງຂ້າພະເຈົ້າ, ພວກທ່ານທີ່ເປັນຂອງສາດສະໜາຈັກນີ້ ພວກທ່ານໄດ້ເກັບຄວາມເປັນຊະເລີຍຂອງບັນພະບຸລຸດຂອງ ພວກທ່ານໄວ້ພຽງພໍຫລືບໍ່ໃນຄວາມຊົງຈຳ? ແທ້ຈິງແລ້ວ, ແລະ ໄດ້ເກັບພຣະເມດຕາ ແລະ ຄວາມອົດກັ້ນຂອງພຣະອົງທີ່ມີ ຕໍ່ເຂົາເຈົ້າໄວ້ພຽງພໍຫລືບໍ່ໃນຄວາມຊົງຈຳ? ແລະ ຍິ່ງໄປກວ່າ ນັ້ນ, ພວກທ່ານໄດ້ເກັບກຳໄວ້ພຽງພໍຫລືບໍ່ໃນຄວາມຊົງຈຳ ວ່າ ພຣະອົງໄດ້ປົດປ່ອຍຈິດວິນຍານຂອງເຂົາເຈົ້າໃຫ້ພົ້ນຈາກນະ ລົກແລ້ວ?

The words which Alma, the High Priest according to the holy order of God, delivered to the people in their cities and villages throughout the land.

Alma 5

Now it came to pass that Alma began to deliver the word of God unto the people, first in the land of Zarahemla, and from thence throughout all the land.

And these are the words which he spake to the people in the church which was established in the city of Zarahemla, according to his own record, saying:

I, Alma, having been consecrated by my father, Alma, to be a high priest over the church of God, he having power and authority from God to do these things, behold, I say unto you that he began to establish a church in the land which was in the borders of Nephi; yea, the land which was called the land of Mormon; yea, and he did baptize his brethren in the waters of Mormon.

And behold, I say unto you, they were delivered out of the hands of the people of king Noah, by the mercy and power of God.

And behold, after that, they were brought into bondage by the hands of the Lamanites in the wilderness; yea, I say unto you, they were in captivity, and again the Lord did deliver them out of bondage by the power of his word; and we were brought into this land, and here we began to establish the church of God throughout this land also.

And now behold, I say unto you, my brethren, you that belong to this church, have you sufficiently retained in remembrance the captivity of your fathers? Yea, and have you sufficiently retained in remembrance his mercy and long-suffering towards them? And moreover, have ye sufficiently retained in remembrance that he has delivered their souls from hell?

ᾳ ຈົ່ງເບິ່ງ, ພຣະອົງໄດ້ປ່ຽນໃຈຂອງເຂົາເຈົ້າ; ແທ້ຈິງແລ້ວ, ພຣະອົງໄດ້ປຸກໃຫ້ເຂົາເຈົ້າຕື່ນຈາກການນອນຫລັບສະໜິດ, ແລະ ເຂົາເຈົ້າໄດ້ຕື່ນຂຶ້ນມາຫາພຣະເຈົ້າ. ຈົ່ງເບິ່ງ, ເຂົາເຈົ້າຢູ່ໃນທ່າມກາງຄວາມມືດ; ເຖິງຢ່າງໃດກໍຕາມ, ຈິດວິນຍານຂອງເຂົາເຈົ້າຍັງສະຫວ່າງສະໄຫວດ້ວຍຄວາມສະຫວ່າງຂອງພຣະຄຳອັນເປັນນິດ; ແທ້ຈິງແລ້ວ, ເຂົາເຈົ້າໄດ້ຖືກລ້ອມໄວ້ດ້ວຍສາຍຮັດແຫ່ງຄວາມຕາຍ ແລະ ສາຍโส้ແຫ່ງນະລົກ, ແລະ ຄວາມພິນາດອັນເປັນນິດໄດ້ຄອຍຖ້າເຂົາເຈົ້າຢູ່.

Behold, he changed their hearts; yea, he awakened them out of a deep sleep, and they awoke unto God. Behold, they were in the midst of darkness; nevertheless, their souls were illuminated by the light of the everlasting word; yea, they were encircled about by the bands of death, and the chains of hell, and an everlasting destruction did await them.

ᾳ ແລະ ບັດນີ້ຂ້າພະເຈົ້າຂໍຖາມພວກທ່ານພີ່ນ້ອງຂອງຂ້າພະເຈົ້າວ່າ ເຂົາເຈົ້າໄດ້ຖືກທຳລາຍບໍ? ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານວ່າ, ບໍ່ເລີຍ, ເຂົາເຈົ້າບໍ່ໄດ້ຖືກທຳລາຍ.

And now I ask of you, my brethren, were they destroyed? Behold, I say unto you, Nay, they were not.

ᾳ ແລະ ຂ້າພະເຈົ້າຂໍຖາມອີກว่า ສາຍຮັດແຫ່ງຄວາມຕາຍຂາດອອກແລ້ວບໍ, ແລະ ສາຍโส้ແຫ່ງນະລົກ ຊຶ່ງລ້ອມເຂົາເຈົ້າໄວ້ນັ້ນຫລຸດອອກແລ້ວບໍ? ຂ້າພະເຈົ້າກ່າວກັບພວກທ່ານว่า, ແທ້ຈິງແລ້ວ, ມັນໄດ້ຫລຸດອອກແລ້ວ, ແລະ ຈິດວິນຍານຂອງເຂົາເຈົ້າໄດ້ຂະຫຍາຍຂຶ້ນ, ແລະ ເຂົາເຈົ້າໄດ້ຮ້ອງສັນລະເສີນຄວາມຮັກທີ່ໄຖ່. ແລະ ຂ້າພະເຈົ້າກ່າວກັບພວກທ່ານว่า ເຂົາເຈົ້າລອດແລ້ວ.

And again I ask, were the bands of death broken, and the chains of hell which encircled them about, were they loosed? I say unto you, Yea, they were loosed, and their souls did expand, and they did sing redeeming love. And I say unto you that they are saved.

ᾳ ແລະ ບັດນີ້ຂ້າພະເຈົ້າຂໍຖາມພວກທ່ານว่า ເຂົາເຈົ້າ ລອດດ້ວຍເງື່ອນໄຂອັນໃດ? ແທ້ຈິງແລ້ວ, ເຂົາເຈົ້າມີເຫດຜົນອັນໃດທີ່ຈະຫວັງໃນຄວາມລອດ? ແມ່ນຫຍັງທີ່ເປັນເຫດໃຫ້ເຂົາເຈົ້າຫລຸດພົ້ນຈາກສາຍຮັດແຫ່ງຄວາມຕາຍ, ແທ້ຈິງແລ້ວ, ແລະ ຈາກສາຍโส້ແຫ່ງນະລົກນັ້ນ?

And now I ask of you on what conditions are they saved? Yea, what grounds had they to hope for salvation? What is the cause of their being loosed from the bands of death, yea, and also the chains of hell?

ᾳ ຈົ່ງເບິ່ງ, ຂ້າພະເຈົ້າບອກພວກທ່ານว่า—ແອວມາບິດາຂອງຂ້າພະເຈົ້າບໍ່ໄດ້ເຊື່ອໃນຄຳ ຊຶ່ງປະກາດໂດຍປາກຂອງ ອະບິນາໄດບໍ? ແລະ ເພິ່ນບໍ່ແມ່ນສາດສະດາຜູ້ບໍລິສຸດບໍ? ເພິ່ນບໍ່ໄດ້ເວົ້າພຣະຄຳຂອງພຣະເຈົ້າບໍ, ແລະ ແອວມາບິດາຂອງຂ້າພະເຈົ້າໄດ້ເຊື່ອຖ້ອຍຄຳເຫລົ່ານັ້ນບໍ?

Behold, I can tell you—did not my father Alma believe in the words which were delivered by the mouth of Abinadi? And was he not a holy prophet? Did he not speak the words of God, and my father Alma believe them?

ᾳ ແລະ ຕາມສັດທາຂອງເພິ່ນ, ຈຶ່ງມີ ການປ່ຽນແປງອັນຍິ່ງໃຫຍ່ເກີດຂຶ້ນໃນໃຈຂອງເພິ່ນ. ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບພວກທ່ານว่า ທັງໝົດນີ້ເປັນຄວາມຈິງ.

And according to his faith there was a mighty change wrought in his heart. Behold I say unto you that this is all true.

ᾳ ແລະ ຈົ່ງເບິ່ງ, ເພິ່ນໄດ້ ສັ່ງສອນພຣະຄຳໃຫ້ແກ່ບັນພະບຸລຸດຂອງພວກທ່ານ, ແລະ ການປ່ຽນແປງອັນຍິ່ງໃຫຍ່ກໍເກີດຂຶ້ນໃນໃຈຂອງເຂົາເຈົ້າຄືກັນ, ແລະ ເຂົາເຈົ້າໄດ້ຖ່ອມຕົວ ແລະ ໄວ້ວາງใจ ໃນ ພຣະເຈົ້າອົງທ່ຽງແທ້ ແລະ ຊົງພຣະຊົນຢູ່. ແລະ ຈົ່ງເບິ່ງ, ເຂົາເຈົ້າຊື່ສັດຈົນເຖິງ ວັນຕາຍ; ສະນັ້ນເຂົາເຈົ້າຈຶ່ງລອດ.

And behold, he preached the word unto your fathers, and a mighty change was also wrought in their hearts, and they humbled themselves and put their trust in the true and living God. And behold, they were faithful until the end; therefore they were saved.

ᾳ ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າຂໍຖາມພວກທ່ານພີ່ນ້ອງຂອງຂ້າພະເຈົ້າໃນສາດສະໜາจักว่า ພວກທ່ານໄດ້ ເກີດຈາກ ພຣະເຈົ້າທາງວິນຍານແລ້ວບໍ? ພວກທ່ານໄດ້ຮັບເງົາຂອງ ພຣະອົງໄວ້ໃນໃບໜ້າຂອງພວກທ່ານແລ້ວບໍ? ພວກທ່ານເຄີຍ ປະສົບ ການປ່ຽນແປງອັນຍິ່ງໃຫຍ່ນີ້ໃນໃຈຂອງພວກທ່ານ ແລ້ວບໍ?

And now behold, I ask of you, my brethren of the church, have ye spiritually been born of God? Have ye received his image in your countenances? Have ye experienced this mighty change in your hearts?

Do ye exercise faith in the redemption of him who created you? Do you look forward with an eye of faith, and view this mortal body raised in immortality, and this corruption raised in incorruption, to stand before God to be judged according to the deeds which have been done in the mortal body?

I say unto you, can you imagine to yourselves that ye hear the voice of the Lord, saying unto you, in that day: Come unto me ye blessed, for behold, your works have been the works of righteousness upon the face of the earth?

Or do ye imagine to yourselves that ye can lie unto the Lord in that day, and say—Lord, our works have been righteous works upon the face of the earth—and that he will save you?

Or otherwise, can ye imagine yourselves brought before the tribunal of God with your souls filled with guilt and remorse, having a remembrance of all your guilt, yea, a perfect remembrance of all your wickedness, yea, a remembrance that ye have set at defiance the commandments of God?

I say unto you, can ye look up to God at that day with a pure heart and clean hands? I say unto you, can you look up, having the image of God engraven upon your countenances?

I say unto you, can ye think of being saved when you have yielded yourselves to become subjects to the devil?

I say unto you, ye will know at that day that ye cannot be saved; for there can no man be saved except his garments are washed white; yea, his garments must be purified until they are cleansed from all stain, through the blood of him of whom it has been spoken by our fathers, who should come to redeem his people from their sins.

ພວກທ່ານໃຊ້ສັດທາໃນການໄຖ່ຂອງພຣະອົງຜູ້ ສ້າງພວກ
ທ່ານບໍ? ພວກທ່ານໄດ້ຄອຍຖ້າດ້ວຍຕາແຫ່ງສັດທາບໍ່ ແລະ
ຫລຽວເບິ່ງຮ່າງກາຍທີ່ເປັນມະຕະນີ້ຖືກ ຍົກຂຶ້ນໄປຫາຄວາມ
ເປັນອະມະຕະ, ແລະ ຄວາມເນົ່າເປື່ອຍນີ້ຖືກຍົກຂຶ້ນໄປຫາຄວາມ
ບໍ່ເນົ່າເປື່ອຍເພື່ອຢືນຢູ່ຕໍ່ພຣະພັກຂອງພຣະເຈົ້າ, ເພື່ອຮັບ ການ
ພິພາກສາຕາມການກະທຳຊຶ່ງເຮັດໄວ້ເມື່ອຢູ່ໃນຮ່າງກາຍທີ່ເປັນ
ມະຕະນີ້?

ຂ້າພະເຈົ້າກ່າວກັບພວກທ່ານວ່າ, ພວກທ່ານຄິດເອງໄດ້ບໍ
ວ່າ ພວກທ່ານໄດ້ຍິນສຸລະສຽງຂອງພຣະຜູ້ເປັນເຈົ້າກ່າວກັບ
ພວກທ່ານໃນມື້ນັ້ນວ່າ: ຈົ່ງມາຫາເຮົາເຖີດ ເຈົ້າ ເປັນສຸກແລ້ວ,
ເພາະຈົ່ງເບິ່ງ, ວຽກງານຂອງເຈົ້າເປັນວຽກງານທີ່ຊອບທຳໃນ
ຜືນແຜ່ນດິນໂລກ?

ຫລື ພວກທ່ານຄິດເອງໄດ້ບໍວ່າ ພວກທ່ານຈະເວົ້າຕົວະຕໍ່
ພຣະເຈົ້າໄດ້ໃນມື້ນັ້ນ, ແລະ ທູນວ່າ—ພຣະອົງເຈົ້າເອີຍ,
ວຽກງານຂອງຂ້ານ້ອຍເປັນວຽກງານທີ່ຊອບທຳໃນຜືນ
ແຜ່ນດິນໂລກ—ແລະ ວ່າພຣະອົງຈະຊ່ວຍພວກທ່ານໃຫ້ລອດ?

ຫລື ອີກປະການໜຶ່ງ, ພວກທ່ານເຫັນຕົວເອງໄດ້ບໍວ່າ ພວກ
ທ່ານຖືກນຳມາຢູ່ໜ້າສານຂອງພຣະເຈົ້າ ຊຶ່ງຈິດວິນຍານຂອງ
ພວກທ່ານເຕັມໄປດ້ວຍຄວາມຮູ້ສຶກຜິດ ແລະ ຄວາມສຳນຶກ
ຜິດ, ໂດຍມີຄວາມຊົງຈຳເຖິງຄວາມຜິດທັງໝົດຂອງພວກ
ທ່ານ, ແທ້ຈິງແລ້ວ, ຄວາມຊົງຈຳເປັນຢ່າງດີເຖິງຄວາມຊົ່ວຮ້າຍ
ທັງໝົດຂອງພວກທ່ານ, ແທ້ຈິງແລ້ວ, ຄວາມຊົງຈຳທີ່ພວກ
ທ່ານໄດ້ຕໍ່ຕ້ານພຣະບັນຍັດຂອງພຣະເຈົ້າ?

ຂ້າພະເຈົ້າກ່າວກັບພວກທ່ານວ່າ ພວກທ່ານຈະເງີຍໜ້າ
ເບິ່ງພຣະເຈົ້າໃນມື້ນັ້ນດ້ວຍໃຈອັນບໍລິສຸດ ແລະ ດ້ວຍມືທີ່
ສະອາດໄດ້ບໍ? ຂ້າພະເຈົ້າກ່າວກັບພວກທ່ານວ່າ ພວກທ່ານຈະ
ເງີຍຂຶ້ນດ້ວຍໃບໜ້າທີ່ມີ ເງົາຂອງພຣະເຈົ້າຊຶ່ງຈາລຶກໄວ້ໃນໃບ
ໜ້າຂອງພວກທ່ານໄດ້ບໍ?

ຂ້າພະເຈົ້າກ່າວກັບພວກທ່ານວ່າ ພວກທ່ານຄິດເຖິງຄວາມ
ລອດໄດ້ບໍ ເມື່ອພວກທ່ານ ຍອມຕົນຂຶ້ນຢູ່ກັບມານ?

ຂ້າພະເຈົ້າກ່າວກັບພວກທ່ານວ່າ ພວກທ່ານຈະຮູ້ໃນມື້ນັ້ນ
ວ່າ ພວກທ່ານຈະ ລອດບໍ່ໄດ້ ເພາະວ່າບໍ່ມີມະນຸດຄົນໃດທີ່ຈະ
ລອດໄດ້ ຖ້າບໍ່ຊຳລະ ອາພອນຂອງເຂົາໃຫ້ຂາວສະອາດເສຍ
ກ່ອນ; ແທ້ຈິງແລ້ວ, ຕ້ອງເຮັດໃຫ້ອາພອນຂອງເຂົາ ບໍລິສຸດຈົນ
ມັນສະອາດຈາກຮອຍເປື້ອນທັງໝົດໂດຍໂລຫິດຂອງພຣະອົງ,
ຜູ້ທີ່ບັນພະບຸລຸດຂອງພວກເຮົາໄດ້ເວົ້າເຖິງ, ຜູ້ທີ່ຈະມາໄຖ່ຜູ້ຄົນ
ຂອງພຣະອົງຈາກບາບຂອງພວກເຂົາ.

ແລະ ບັດນີ້ຂ້າພະເຈົ້າຂໍຖາມພວກທ່ານພີ່ນ້ອງຂອງ ຂ້າພະເຈົ້າວ່າ ພວກທ່ານຈະຮູ້ສຶກແນວໃດຖ້າຫາກພວກທ່ານ ໄດ້ຢືນຢູ່ຕໍ່ໜ້າບ່ອນພິພາກສາຂອງພຣະເຈົ້າ ແລະ ອາພອນ ຂອງພວກທ່ານເປື້ອນ ເລືອດ ແລະ ເຕັມໄປດ້ວຍ ຄວາມສົກກະ ປົກຕ່າງໆນາໆ? ຈົ່ງເບິ່ງ, ສິ່ງເຫລົ່ານີ້ຈະເປັນຫລັກຖານຟ້ອງ ຫຍັງແດ່ຕໍ່ຕ້ານພວກທ່ານ?

And now I ask of you, my brethren, how will any of you feel, if ye shall stand before the bar of God, having your garments stained with blood and all manner of filthiness? Behold, what will these things testify against you?

ຈົ່ງເບິ່ງ, ມັນຈະບໍ່ ເປັນຫລັກຖານບໍ່ວ່າ ພວກທ່ານເປັນ ຄາດຕະກອນ, ແທ້ຈິງແລ້ວ, ແລະ ວ່າພວກທ່ານມີຄວາມຜິດ ກ່ຽວກັບຄວາມຊົ່ວຮ້າຍຕ່າງໆນຳອີກບໍ?

Behold will they not testify that ye are murderers, yea, and also that ye are guilty of all manner of wickedness?

ຈົ່ງເບິ່ງ, ພີ່ນ້ອງຂອງຂ້າພະເຈົ້າ, ພວກທ່ານຄິດບໍ່ວ່າຄົນເຊັ່ນ ນັ້ນຈະມີບ່ອນນັ່ງຢູ່ໃນອານາຈັກຂອງພຣະເຈົ້າຮ່ວມກັບ ອັບຣາຮາມ, ຮ່ວມກັບອີຊາກ, ແລະ ຮ່ວມກັບຢາໂຄບ, ແລະ ຮ່ວມກັບສາດສະດາຜູ້ບໍລິສຸດທັງຫລາຍ, ຊຶ່ງອາພອນຂອງຄົນ ເຫລົ່ານັ້ນສະອາດ ແລະ ບໍ່ມີມົນທິນ, ບໍລິສຸດ ແລະ ຂາວ ສະອາດ?

Behold, my brethren, do ye suppose that such an one can have a place to sit down in the kingdom of God, with Abraham, with Isaac, and with Jacob, and also all the holy prophets, whose garments are cleansed and are spotless, pure and white?

ຂ້າພະເຈົ້າກ່າວກັບພວກທ່ານວ່າ, ບໍ່ເລີຍ; ເວັ້ນເສຍແຕ່ພວກ ທ່ານຈະເຮັດໃຫ້ພຣະຜູ້ສ້າງຂອງພວກເຮົາເປັນຜູ້ເວົ້າຕົວະນັບ ຕັ້ງແຕ່ຕົ້ນ, ຫລື ຄິດວ່າພຣະອົງເປັນຜູ້ເວົ້າຕົວະນັບຕັ້ງແຕ່ຕົ້ນ, ພວກທ່ານຈະບໍ່ຄິດວ່າຄົນເຊັ່ນນັ້ນຈະມີບ່ອນອາໄສໃນອານາຈັກ ສະຫວັນໄດ້; ແຕ່ພວກເຂົາຈະຖືກຂັບໄລ່ອອກໄປເພາະວ່າພວກ ເຂົາເປັນ ລູກຫລານຂອງອານາຈັກຂອງມານ.

I say unto you, Nay; except ye make our Creator a liar from the beginning, or suppose that he is a liar from the beginning, ye cannot suppose that such can have place in the kingdom of heaven; but they shall be cast out for they are the children of the kingdom of the devil.

ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານພີ່ນ້ອງ ຂອງຂ້າພະເຈົ້າວ່າ ຖ້າຫາກພວກທ່ານເຄີຍປະສົບກັບ ການ ປ່ຽນແປງໃນໃຈ ແລະ ຖ້າຫາກພວກທ່ານຮູ້ສຶກຢາກຮ້ອງ ເພງ ສັນລະເສີນຄວາມຮັກທີ່ໄຖ່, ຂ້າພະເຈົ້າຈະຖາມວ່າ ພວກທ່ານ ສາມາດຮູ້ສຶກເຊັ່ນນັ້ນບໍ່ໃນຂະນະນີ້?

And now behold, I say unto you, my brethren, if ye have experienced a change of heart, and if ye have felt to sing the song of redeeming love, I would ask, can ye feel so now?

ພວກທ່ານໄດ້ເດີນໄປໂດຍການຮັກສາຕົນເອງ ບໍ່ໃຫ້ມີຂໍ້ຕຳນິ ຕໍ່ພຣະພັກຂອງພຣະເຈົ້າບໍ? ຖ້າຫາກພວກທ່ານຖືກເອີ້ນໃຫ້ ຕາຍໃນເວລານີ້, ພວກທ່ານຈະກ່າວໄດ້ບໍພາຍໃນຕົວຂອງພວກ ທ່ານວ່າ ພວກທ່ານ ຖ່ອມຕົວພຽງພໍແລ້ວ? ວ່າອາພອນຂອງ ພວກທ່ານນັ້ນສະອາດ ແລະ ຂາວແລ້ວດ້ວຍໂລຫິດຂອງ ພຣະຄຣິດຜູ້ຈະສະເດັດມາ ໄຖ່ຜູ້ຄົນຂອງພຣະອົງຈາກບາບ ຂອງພວກເຂົາ?

Have ye walked, keeping yourselves blameless before God? Could ye say, if ye were called to die at this time, within yourselves, that ye have been sufficiently humble? That your garments have been cleansed and made white through the blood of Christ, who will come to redeem his people from their sins?

ຈົ່ງເບິ່ງ, ພວກທ່ານຖອດ ຄວາມທະນົງຕົວອອກແລ້ວບໍ? ຂ້າພະເຈົ້າກ່າວກັບພວກທ່ານວ່າ ຖ້າຫາກພວກທ່ານຍັງບໍ່ໄດ້ ຖອດມັນອອກ, ພວກທ່ານກໍຍັງບໍ່ພ້ອມທີ່ຈະພົບກັບພຣະເຈົ້າ ເທື່ອ. ຈົ່ງເບິ່ງ ພວກທ່ານຕ້ອງຕຽມຢ່າງໄວ ເພາະອານາຈັກ ສະຫວັນຈະມາເຖິງໃນບໍ່ຊ້ານີ້ ແລະ ຄົນເຊັ່ນນັ້ນຈະບໍ່ມີຊີວິດ ນິລັນດອນ.

Behold, are ye stripped of pride? I say unto you, if ye are not ye are not prepared to meet God. Behold ye must prepare quickly; for the kingdom of heaven is soon at hand, and such an one hath not eternal life.

ຂ້ານ້ອຍ ເວລາ ໃກ້ ເຂົ້າ ມາ ແລ້ວ ທີ່ ພວກ ເຂົາ ຈະ ຕ້ອງ ກັບ ใจ ຖ້າ ບໍ່ ດັ່ງ ນັ້ນ ພວກ ເຂົາ ຈະ ລອດ ບໍ່ ໄດ້!

ແທ້ ຈິງ ແລ້ວ, ເຖິງ ແມ່ນ ວິ ບັດ ແກ່ ທຸກ ຄົນ ຜູ້ ທີ່ ເຮັດ ຄວາມ ຊົ່ວ ຮ້າຍ; ຈົ່ງ ກັບ ใจ, ຈົ່ງ ກັບ ใจ ເຖີດ, ເພາະ ອົງ ພຣະ ຜູ້ ເປັນ ເຈົ້າ ໄດ້ ຮັບ ສັ່ງ ເລື່ອງ ນີ້!

ຈົ່ງ ເບິ່ງ, ພຣະ ອົງ ໄດ້ ສົ່ງ ຄຳ ເຊີນ ມາ ຫາ ມະ ນຸດ ທັງ ປວງ, ເພາະ ພຣະ ພາ ຫາ ແຫ່ງ ຄວາມ ເມດ ຕາ ຂອງ ພຣະ ອົງ ໄດ້ ເດ່ ອອກ ມາ ຫາ ພວກ ເຂົາ, ແລະ ພຣະ ອົງ ໄດ້ ກ່າ ວ ວ່າ: ຈົ່ງ ກັບ ใจ ເຖີດ, ແລະ ເຮົາ ຈະ ຮັບ ເຈົ້າ ໄວ້.

ແທ້ ຈິງ ແລ້ວ, ພຣະ ອົງ ໄດ້ ກ່າ ວ ວ່າ: ຈົ່ງ ມາ ຫາ ເຮົາ ແລະ ເຈົ້າ ຈະ ຮັບ ໝາ ກ ໄມ້ ຈາ ກ ຕົ້ນ ໄມ້ ແຫ່ງ ຊີ ວິ ດ; ແທ້ ຈິງ ແລ້ວ, ເຈົ້າ ຈະ ກິ ນ ເຂົ້າ ແລະ ດື່ ມ ນ້ຳ ແຫ່ງ ຊີ ວິ ດ ຢ່ າ ງ ມີ ອິ ດ ສະ ລະ;

ແທ້ ຈິງ ແລ້ວ, ຈົ່ງ ມາ ຫາ ເຮົາ ແລະ ຈົ່ງ ນຳ ເອົາ ວຽ ກ ງາ ນ ແຫ່ ງ ຄວາ ມ ຊອ ບ ທຳ ມາ, ແລະ ເຈົ້ າ ຈະ ບໍ່ ຖືກ ໂຄ່ ນ ລົ ງ ແລະ ໂ ຍ ນ ເຂົ້ າ ກ ອ ງ ໄ ຟ—

ເພາ ະ ຈົ່ ງ ເບິ່ ງ, ເ ວ ລ າ ໃ ກ້ ເ ຂົ້ າ ມ າ ເ ຖິ ງ ແ ລ້ ວ ຖ້ າ ຜູ້ ໃ ດ ກ ໍ ຕ າ ມ ທີ່ ບໍ່ ນ ຳ ເ ອົ າ ຜ ົ ນ ຄ ີ ອ ອ ກ ມ າ, ຫ ລ ື ຜ ູ້ ໃ ດ ກ ໍ ຕ າ ມ ທ ີ່ ບ ໍ່ ທ ຳ ງ າ ນ ແ ຫ່ ງ ຄ ວ າ ມ ຊ ອ ບ ທ ຳ, ຜ ູ້ ນ ັ ້ ນ ຍ ່ ອ ມ ມ ີ ເ ຫ ຕ ຜ ົ ນ ທ ີ່ ຈ ະ ຮ ້ ອ ງ ໄ ຫ້ ແ ລ ະ ເ ປ ັ ນ ທ ຸ ກ.

ໂ ອ້ ທ່ ານ ຜ ູ້ ສ ້ າ ງ ຄ ວ າ ມ ຊ ົ ່ ວ ຮ ້ າ ຍ ເ ອ ີ ຍ; ທ່ ານ ທ ັ ງ ຫ ລ າ ຍ ທ ີ່ ອ ວ ດ ອ ົ ່ ງ ກ ັ ບ ສ ິ ່ ງ ທ ີ່ ບ ໍ່ ມ ີ ປ ະ ໂ ຫ ຍ ດ ຂ ອ ງ ໂ ລ ກ, ທ່ ານ ທ ັ ງ ຫ ລ າ ຍ ທ ີ່ ບ ອ ກ ວ່ າ ຕ ົ ວ ເ ອ ງ ຮ ູ້ ທ າ ງ ແ ຫ່ ງ ຄ ວ າ ມ ຊ ອ ບ ທ ຳ, ປ າ ນ ນ ັ ້ ນ ຍ ັ ງ ຫ ລ ົ ງ ທ າ ງ ໄ ປ ເ ໝ ື ອ ນ ໂ ຕ ແ ກ ະ ທ ີ່ ບ ໍ່ ມ ີ ຜ ູ້ ລ ້ ຽ ງ, ທ ັ ງ ທ ີ່ ຜ ູ້ ລ ້ ຽ ງ ໄ ດ້ ເ ອ ີ້ ນ ຫ າ ພ ວ ກ ທ່ ານ ແ ລ ະ ຍ ັ ງ ເ ອ ີ້ ນ ຫ າ ພ ວ ກ ທ່ ານ ຢ ູ່, ແ ຕ່ ພ ວ ກ ທ່ ານ ບ ໍ່ ຍ ອ ມ ເ ຊ ື່ ອ ຟ ັ ງ ສ ຸ ລ ະ ສ ຽ ງ ຂ ອ ງ ພ ຣ ະ ອ ົ ງ ເ ລ ີ ຍ!

ຈ ົ ່ ງ ເ ບ ິ່ ງ, ຂ ້ າ ພ ະ ເ ຈ ົ້ າ ກ ່ າ ວ ກ ັ ບ ພ ວ ກ ທ່ ານ ວ ່ າ ຜ ູ້ ລ ້ ຽ ງ ທ ີ່ ດ ີ ຄ ົ ນ ນ ັ ້ ນ ໄ ດ ້ ເ ອ ີ ້ ນ ຫ າ ພ ວ ກ ທ ່ ານ ຢ ູ ່; ແ ທ ້ ຈ ິ ງ ແ ລ ້ ວ, ແ ລ ະ ໃ ນ ພ ຣ ະ ນ າ ມ ຂ ອ ງ ພ ຣ ະ ອ ົ ງ ເ ອ ງ ທ ີ ່ ພ ຣ ະ ອ ົ ງ ເ ອ ີ ້ ນ ຫ າ ພ ວ ກ ທ ່ ານ, ຊ ຶ ່ ງ ຄ ື ພ ຣ ະ ນ າ ມ ຂ ອ ງ ພ ຣ ະ ຄ ຣ ິ ດ; ແ ລ ະ ຖ ້ າ ຫ າ ກ ພ ວ ກ ທ ່ ານ ບ ໍ ່ ເ ຊ ື ່ ອ ຟ ັ ງ ສ ຸ ລ ະ ສ ຽ ງ ຂ ອ ງ ຜ ູ ້ ລ ້ ຽ ງ ທ ີ ່ ດ ີ ຕ າ ມ ຊ ື ່ ທ ີ ່ ໃ ຊ ້ ເ ອ ີ ້ ນ ພ ວ ກ ທ ່ ານ ນ ັ ້ ນ, ຈ ົ ່ ງ ເ ບ ິ ່ ງ, ພ ວ ກ ທ ່ ານ ກ ໍ ບ ໍ ່ ແ ມ ່ ນ ແ ກ ະ ຂ ອ ງ ຜ ູ ້ ລ ້ ຽ ງ ທ ີ ່ ດ ີ ຄ ົ ນ ນ ັ ້ ນ.

Behold, I say, is there one among you who is not stripped of envy? I say unto you that such an one is not prepared; and I would that he should prepare quickly, for the hour is close at hand, and he knoweth not when the time shall come; for such an one is not found guiltless.

And again I say unto you, is there one among you that doth make a mock of his brother, or that heapeth upon him persecutions?

Wo unto such an one, for he is not prepared, and the time is at hand that he must repent or he cannot be saved!

Yea, even wo unto all ye workers of iniquity; repent, repent, for the Lord God hath spoken it!

Behold, he sendeth an invitation unto all men, for the arms of mercy are extended towards them, and he saith: Repent, and I will receive you.

Yea, he saith: Come unto me and ye shall partake of the fruit of the tree of life; yea, ye shall eat and drink of the bread and the waters of life freely;

Yea, come unto me and bring forth works of righteousness, and ye shall not be hewn down and cast into the fire—

For behold, the time is at hand that whosoever bringeth forth not good fruit, or whosoever doeth not the works of righteousness, the same have cause to wail and mourn.

O ye workers of iniquity; ye that are puffed up in the vain things of the world, ye that have professed to have known the ways of righteousness nevertheless have gone astray, as sheep having no shepherd, notwithstanding a shepherd hath called after you and is still calling after you, but ye will not hearken unto his voice!

Behold, I say unto you, that the good shepherd doth call you; yea, and in his own name he doth call you, which is the name of Christ; and if ye will not hearken unto the voice of the good shepherd, to the name by which ye are called, behold, ye are not the sheep of the good shepherd.

ມ.ລ ແລະ ບັດນີ້ຖ້າຫາກພວກທ່ານບໍ່ແມ່ນແກະຂອງຜູ້ລ້ຽງທີ່ດີ ຄົນນັ້ນ, ພວກທ່ານເປັນແກະຂອງ ຝູງໃດ? ຈົ່ງເບິ່ງ, ຂ້າພະເຈົ້າ ກ່າວກັບພວກທ່ານວ່າ ມານຄືຜູ້ລ້ຽງຂອງພວກທ່ານ, ແລະ ພວກທ່ານເປັນແກະຂອງມັນ; ແລະ ບັດນີ້, ໃຜຈະປະຕິເສດ ເລື່ອງນີ້ໄດ້? ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ຜູ້ໃດ ກໍຕາມທີ່ປະຕິເສດເລື່ອງນີ້ ຍ່ອມເປັນ ຄົນເວົ້າຕົວະ ແລະ ເປັນ ລູກຂອງມານ.

ມ.ດ ເພາະຂ້າພະເຈົ້າກ່າວກັບພວກທ່ານວ່າ ອັນໃດກໍຕາມທີ່ ດີ ແມ່ນມາຈາກພຣະເຈົ້າ, ແລະ ອັນໃດກໍຕາມທີ່ຊົ່ວແມ່ນມາຈາກ ມານ.

ມ.ດ.ນ ສະນັ້ນ, ຖ້າຫາກຄົນໜຶ່ງນຳເອົາ ວຽກງານດີອອກມາ ເຂົາ ຍ່ອມເຊື່ອຟັງສຽງຂອງຜູ້ລ້ຽງທີ່ດີຄົນນັ້ນ ແລະ ເຂົາຍ່ອມ ຕິດຕາມຄົນນັ້ນ; ແຕ່ຜູ້ໃດກໍຕາມທີ່ນຳເອົາວຽກງານຊົ່ວອອກ ມາ, ຜູ້ນັ້ນກໍກາຍເປັນ ລູກຂອງມານ ເພາະເຊື່ອຟັງສຽງຂອງ ມັນ ແລະ ຕິດຕາມມັນໄປ.

ມ.ດ.ບ ແລະ ຜູ້ໃດກໍຕາມທີ່ເຮັດແບບນີ້ຕ້ອງໄດ້ຮັບ ຄ່າຈ້າງຂອງຕົນ; ສະນັ້ນ, ສຳລັບ ຄ່າຈ້າງຂອງເຂົາ, ເຂົາຈຶ່ງໄດ້ຮັບ ຄວາມຕາຍໃນ ເລື່ອງທີ່ກ່ຽວກັບຄວາມຊອບທຳ, ໂດຍທີ່ຕາຍຈາກວຽກງານດີ ທັງໝົດ.

ມ.ດ.ມ ແລະ ບັດນີ້ພີ່ນ້ອງຂອງຂ້າພະເຈົ້າ, ຂ້າພະເຈົ້າຢາກໃຫ້ພວກ ທ່ານຟັງຂ້າພະເຈົ້າ, ເພາະວ່າຂ້າພະເຈົ້າເວົ້າດ້ວຍພະລັງຂອງ ຈິດວິນຍານຂອງຂ້າພະເຈົ້າ; ຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບພວກ ທ່ານຢ່າງແຈ່ມແຈ້ງ ເພື່ອພວກທ່ານຈະບໍ່ເຂົ້າໃຈຜິດ, ຫລື ໄດ້ ເວົ້າຕາມພຣະບັນຍັດຂອງພຣະເຈົ້າ.

ມ.ດ.ສ ເພາະຂ້າພະເຈົ້າໄດ້ຖືກເອີ້ນໃຫ້ມາເວົ້າຕາມນີ້, ຕາມ ລະບຽບ ອັນສັກສິດຂອງພຣະເຈົ້າ, ຊຶ່ງມີຢູ່ໃນພຣະຄຣິດພຣະເຢຊູ; ແທ້ ຈິງແລ້ວ, ຂ້າພະເຈົ້າໄດ້ຖືກບັນຊາໃຫ້ມາຢືນຢັນ ແລະ ໃຫ້ຖ້ອຍ ຄຳແກ່ຜູ້ຄົນພວກນີ້ເຖິງເລື່ອງທີ່ບັນພະບຸລຸດຂອງພວກເຮົາໄດ້ ກ່າວໄວ້ກ່ຽວກັບເລື່ອງທີ່ຈະມາເຖິງ.

ມ.ດ.ບ ແລະ ນີ້ຍັງບໍ່ໝົດ. ພວກທ່ານບໍ່ຄິດບໍວ່າ ຂ້າພະເຈົ້າເອງກໍ ຮູ້ຈັກເຖິງເລື່ອງເຫລົ່ານີ້ໂດຍຕົວຂອງຂ້າພະເຈົ້າເອງ? ຈົ່ງເບິ່ງ, ຂ້າພະເຈົ້າຂໍເປັນພະຍານຕໍ່ພວກທ່ານວ່າ ຂ້າພະເຈົ້າຮູ້ເລື່ອງ ເຫລົ່ານີ້ທີ່ຂ້າພະເຈົ້າເວົ້າມາແລ້ວວ່າເປັນຄວາມຈິງ. ແລະ ພວກ ທ່ານຄິດວ່າຂ້າພະເຈົ້າຮູ້ເຖິງຄວາມແນ່ນອນຂອງເລື່ອງເຫລົ່ານີ້ ໄດ້ແນວໃດ?

And now if ye are not the sheep of the good shepherd, of what fold are ye? Behold, I say unto you, that the devil is your shepherd, and ye are of his fold; and now, who can deny this? Behold, I say unto you, whosoever denieth this is a liar and a child of the devil.

For I say unto you that whatsoever is good cometh from God, and whatsoever is evil cometh from the devil.

Therefore, if a man bringeth forth good works he hearkeneth unto the voice of the good shepherd, and he doth follow him; but whosoever bringeth forth evil works, the same becometh a child of the devil, for he hearkeneth unto his voice, and doth follow him.

And whosoever doeth this must receive his wages of him; therefore, for his wages he receiveth death, as to things pertaining unto righteousness, being dead unto all good works.

And now, my brethren, I would that ye should hear me, for I speak in the energy of my soul; for behold, I have spoken unto you plainly that ye cannot err, or have spoken according to the commandments of God.

For I am called to speak after this manner, according to the holy order of God, which is in Christ Jesus; yea, I am commanded to stand and testify unto this people the things which have been spoken by our fathers concerning the things which are to come.

And this is not all. Do ye not suppose that I know of these things myself? Behold, I testify unto you that I do know that these things whereof I have spoken are true. And how do ye suppose that I know of their surety?

๔๖ ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ເລື່ອງນີ້ເປັນທີ່ ຮູ້ແກ່ຂ້າພະເຈົ້າໂດຍພຣະວິນຍານສັກສິດຂອງພຣະເຈົ້າ. ຈົ່ງເບິ່ງ, ຂ້າພະເຈົ້າໄດ້ ຖືສິນອົດເຂົ້າ ແລະ ອະທິຖານມາຫລາຍມື້ ເພື່ອ ຂ້າພະເຈົ້າຈະໄດ້ຮູ້ເລື່ອງເຫລົ່ານີ້ດ້ວຍຕົວເອງ. ແລະ ບັດນີ້ ຂ້າພະເຈົ້າຮູ້ໄດ້ດ້ວຍຕົວເອງວ່າ ເລື່ອງເຫລົ່ານີ້ເປັນຄວາມຈິງ ເພາະອົງພຣະຜູ້ເປັນເຈົ້າໄດ້ສະແດງມັນໃຫ້ປະຈັກແກ່ ຂ້າພະເຈົ້າໂດຍພຣະວິນຍານສັກສິດຂອງພຣະອົງ; ແລະ ນີ້ຄື ວິນຍານແຫ່ງ ການເປີດເຜີຍ ຊຶ່ງຢູ່ໃນຂ້າພະເຈົ້າ.

Behold, I say unto you they are made known unto me by the Holy Spirit of God. Behold, I have fasted and prayed many days that I might know these things of myself. And now I do know of myself that they are true; for the Lord God hath made them manifest unto me by his Holy Spirit; and this is the spirit of revelation which is in me.

๔๗ ແລະ ຍິ່ງໄປກວ່ານັ້ນ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ຂ້າພະເຈົ້າໄດ້ຮັບການເປີດເຜີຍດັ່ງນີ້ວ່າ ຄຳຊຶ່ງບັນພະບຸລຸດ ຂອງພວກເຮົາເວົ້າໄວ້ນັ້ນເປັນຄວາມຈິງ ແມ່ນແຕ່ຕາມວິນຍານ ແຫ່ງການທຳນາຍຊຶ່ງມີຢູ່ໃນຂ້າພະເຈົ້າ, ຊຶ່ງເປັນໄປໂດຍການ ສະແດງໃຫ້ປະຈັກຂອງພຣະວິນຍານຂອງພຣະເຈົ້ານຳອີກ.

And moreover, I say unto you that it has thus been revealed unto me, that the words which have been spoken by our fathers are true, even so according to the spirit of prophecy which is in me, which is also by the manifestation of the Spirit of God.

๔๘ ຂ້າພະເຈົ້າກ່າວກັບພວກທ່ານວ່າ ຂ້າພະເຈົ້າຮູ້ດ້ວຍຕົວເອງ ວ່າອັນໃດກໍຕາມທີ່ຂ້າພະເຈົ້າຈະກ່າວກັບພວກທ່ານກ່ຽວກັບ ສິ່ງທີ່ຈະມາເຖິງນັ້ນ ເປັນຄວາມຈິງ; ແລະ ຂ້າພະເຈົ້າກ່າວກັບ ພວກທ່ານ ວ່າຂ້າພະເຈົ້າຮູ້ວ່າ ພຣະເຢຊູຄຣິດຈະສະເດັດມາ, ແທ້ຈິງແລ້ວ, ແມ່ນພຣະບຸດອົງດຽວທີ່ຖືກຳເນີດຈາກ ພຣະບິດາ, ເຕັມໄປດ້ວຍພຣະຄຸນ ແລະ ພຣະເມດຕາ ແລະ ຄວາມຈິງ. ແລະ ຈົ່ງເບິ່ງ, ພຣະອົງຈະສະເດັດມາເພື່ອເອົາບາບ ຂອງໂລກໄປ, ແທ້ຈິງແລ້ວ, ບາບຂອງທຸກຄົນທີ່ເຊື່ອຢ່າງແນ່ວ ແນ່ໃນພຣະນາມຂອງພຣະອົງ.

I say unto you, that I know of myself that whatsoever I shall say unto you, concerning that which is to come, is true; and I say unto you, that I know that Jesus Christ shall come, yea, the Son, the Only Begotten of the Father, full of grace, and mercy, and truth. And behold, it is he that cometh to take away the sins of the world, yea, the sins of every man who steadfastly believeth on his name.

๔๙ ແລະ ບັດນີ້ຂ້າພະເຈົ້າກ່າວກັບພວກທ່ານວ່າ ນີ້ຄື ຖານະຊຶ່ງ ຂ້າພະເຈົ້າຖືກເອີ້ນມາ, ແທ້ຈິງແລ້ວ, ເພື່ອສັ່ງສອນພີ່ນ້ອງທີ່ຮັກ ແພງຂອງຂ້າພະເຈົ້າ, ແລະ ທຸກຄົນທີ່ຢູ່ໃນແຜ່ນດິນ ເພື່ອ ສັ່ງສອນຄົນທັງປວງ, ທັງແກ່ ແລະ ໜຸ່ມ, ທັງຂ້າທາດ ແລະ ຜູ້ ເປັນອິດສະລະ; ແທ້ຈິງແລ້ວ, ຂ້າພະເຈົ້າກ່າວກັບພວກທ່ານຜູ້ ມີອາຍຸສູງ ແລະ ຜູ້ທີ່ມີອາຍຸປານກາງ, ແລະ ຄົນລຸ້ນໃໝ່; ແທ້ຈິງ ແລ້ວ, ເພື່ອອ້ອນວອນຕໍ່ພວກເຂົາວ່າ ພວກເຂົາຕ້ອງກັບໃຈ ແລະ ເກີດໃໝ່.

And now I say unto you that this is the order after which I am called, yea, to preach unto my beloved brethren, yea, and every one that dwelleth in the land; yea, to preach unto all, both old and young, both bond and free; yea, I say unto you the aged, and also the middle aged, and the rising generation; yea, to cry unto them that they must repent and be born again.

๕๐ ແທ້ຈິງແລ້ວ, ພຣະວິນຍານໄດ້ກ່າວດັ່ງນີ້: ຈົ່ງກັບໃຈ, ເຈົ້າ ທັງຫລາຍທີ່ສຸດຂອງແຜ່ນດິນໂລກ, ເພາະອານາຈັກສະຫວັນ ໃກ້ຈະມາເຖິງໃນບໍ່ຊ້ານີ້; ແທ້ຈິງແລ້ວ, ພຣະບຸດຂອງພຣະເຈົ້າ ຈະສະເດັດມາ ດ້ວຍລັດສະໝີພາບຂອງພຣະອົງ, ດ້ວຍລິດເດດ, ເດຊານຸພາບ, ອຳນາດ ແລະ ການຄອບຄອງຂອງພຣະອົງ. ແທ້ ຈິງແລ້ວ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າກ່າວ ກັບພວກທ່ານວ່າ ພຣະວິນຍານໄດ້ກ່າວໄວ້ວ່າ: ຈົ່ງເບິ່ງ ລັດສະໝີພາບຂອງ ອົງກະສັດແຫ່ງແຜ່ນດິນໂລກທັງໝົດ; ແລະ ໃນໄວໆນີ້ອົງກະສັດແຫ່ງສະຫວັນຈະສ່ອງຄວາມ ສະຫว่າງລົງມາເທິງບັນດາລູກຫລານມະນຸດທັງປວງນຳອີກ.

Yea, thus saith the Spirit: Repent, all ye ends of the earth, for the kingdom of heaven is soon at hand; yea, the Son of God cometh in his glory, in his might, majesty, power, and dominion. Yea, my beloved brethren, I say unto you, that the Spirit saith: Behold the glory of the King of all the earth; and also the King of heaven shall very soon shine forth among all the children of men.

ຂ ແລະ ພຣະວິນຍານໄດ້ກ່າວກັບຂ້າພະເຈົ້າອີກ, ແທ້ຈິງແລ້ວ, ໄດ້ຮ້ອງຂໍຂ້າພະເຈົ້າດ້ວຍສຽງອັນມີລິດເດດ, ມີຄວາມວ່າ: ຈົ່ງ ອອກໄປ ແລະ ກ່າວກັບຜູ້ຄົນພວກນີ້—ຈົ່ງກັບໃຈ, ເພາະຖ້າ ຫາກພວກທ່ານບໍ່ກັບໃຈ ພວກທ່ານກໍບໍ່ມີທາງທີ່ຈະໄດ້ຮັບ ອານາຈັກ ສະຫວັນມາເປັນມູນມໍລະດົກໄດ້.

ຂ ແລະ ອີກຢ່າງໜຶ່ງ ຂ້າພະເຈົ້າກ່າວກັບພວກທ່ານວ່າ ພຣະວິນຍານໄດ້ກ່າວໄວ້ວ່າ: ຈົ່ງເບິ່ງ, ຂວານລໍຢູ່ທີ່ຮາກຕົ້ນໄມ້; ສະນັ້ນ ຕົ້ນໃດທີ່ບໍ່ເປັນໝາກດີຈະຖືກ ໂຄ່ນລົງ ແລະ ໂຍນເຂົ້າ ກອງໄຟ, ແທ້ຈິງແລ້ວ, ເປັນໄຟທີ່ຈະມອດບໍ່ໄດ້, ເຖິງແມ່ນເປັນ ໄຟທີ່ບໍ່ຮູ້ມອດ. ຈົ່ງເບິ່ງ, ແລະ ຈົ່ງຈຳໄວ້ວ່າ ພຣະຜູ້ບໍລິສຸດໄດ້ຮັບ ສັ່ງເລື່ອງນີ້.

ຂ ແລະ ບັດນີ້ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າ ກ່າວກັບພວກທ່ານວ່າ, ພວກທ່ານຈະຕໍ່ຕ້ານຂໍ້ຄວາມນີ້ໄດ້ບໍ; ແທ້ຈິງແລ້ວ, ພວກທ່ານຈະປະຖິ້ມເລື່ອງເຫລົ່ານີ້ໄດ້ບໍ, ແລະ ຢຽບຍ່ຳພຣະຜູ້ບໍລິສຸດໄວ້ໃຕ້ຕີນຂອງພວກທ່ານໄດ້ບໍ; ແທ້ຈິງ ແລ້ວ, ພວກທ່ານຈະອວດອົ່ງໃນ ຄວາມທະນົງໃຈຂອງພວກ ທ່ານໄດ້ບໍ; ແທ້ຈິງແລ້ວ, ທ່ານຍັງຈະຂຶ້ນນຸ່ງເສື້ອຜ້າ ລາຄາແພງ ແລະ ໝົກໝຸ້ນຢູ່ກັບສິ່ງທີ່ບໍ່ມີປະ�โຫຍດຂອງໂລກ, ກັບ ຂອງ ມີຄ່າຂອງພວກທ່ານຢູ່ບໍ?

ຂ ແທ້ຈິງແລ້ວ, ພວກທ່ານຈະຝືນຄິດຢູ່ບໍວ່າ ພວກທ່ານເປັນ ຄົນດີກວ່າຄົນອື່ນ; ແທ້ຈິງແລ້ວ, ພວກທ່ານຈະຝືນຂົ່ມເຫັງ ພີ່ນ້ອງຂອງພວກທ່ານຜູ້ທີ່ຖ່ອມຕົວ ແລະ ເດີນໄປຕາມ ລະບຽບອັນສັກສິດຂອງພຣະເຈົ້າ, ຊຶ່ງໂດຍຖານະນີ້ພວກເຂົາໄດ້ ຖືກນຳມາສູ່ສາດສະໜາຈັກ, ໂດຍໄດ້ຮັບ ການຊຳລະໃຫ້ບໍລິສຸດ ໂດຍພຣະວິນຍານສັກສິດ, ແລະ ພວກເຂົາໄດ້ນຳວຽກງານຊຶ່ງ ສົມຄວນກັບການກັບໃຈອອກມາ—

ຂ ແທ້ຈິງແລ້ວ, ແລະ ພວກທ່ານຈະຂຶ້ນຫັນຫລັງໃຫ້ ຄົນຍາກ ຈົນ ແລະ ຄົນຂັດສົນ, ແລະ ກີດກັນເຂົ້າຂອງ ຂອງພວກທ່ານ ຈາກພວກເຂົາຢູ່ບໍ?

ຂ ແລະ ສຸດທ້າຍ, ທຸກຄົນທີ່ຈະຂຶ້ນຢູ່ໃນຄວາມຊົ່ວຮ້າຍ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ຄົນເຫລົ່ານີ້ຄືຄົນທີ່ຈະຖືກ ໂຄ່ນລົງ ແລະ ໂຍນເຂົ້າກອງໄຟ ຖ້າຫາກພວກເຂົາບໍ່ກັບໃຈຢ່າງ ໄວ.

ຂ ແລະ ບັດນີ້ຂ້າພະເຈົ້າກ່າວກັບພວກທ່ານວ່າ ທຸກຄົນທີ່ ປາດຖະໜາຈະຕິດຕາມສຽງຂອງ ຜູ້ລ້ຽງທີ່ດີ, ຈົ່ງອອກມາຈາກ ຄົນຊົ່ວເຖີດ, ແລະ ຈົ່ງ ແຍກຍ້າຍກັນຢູ່, ແລະ ຈົ່ງຢ່າແຕະຕ້ອງ ສິ່ງທີ່ບໍ່ສະອາດຂອງພວກເຂົາ; ແລະ ຈົ່ງເບິ່ງຊື່ຂອງພວກເຂົາ ຈະຖືກ ລຶບໄປ, ເພື່ອວ່າຊື່ຂອງຄົນຊົ່ວຈະບໍ່ຖືກນັບເຂົ້າຢູ່ໃນ ບັນດາຊື່ຂອງຄົນຊອບທຳ, ເພື່ອພຣະຄຳຂອງພຣະເຈົ້າຈະ ສຳເລັດ ຊຶ່ງກ່າວໄວ້ວ່າ: ຊື່ຂອງຄົນຊົ່ວຈະບໍ່ປະປົນຢູ່ກັບຊື່ຂອງ ຜູ້ຄົນຂອງເຮົາ;

And also the Spirit saith unto me, yea, crieth unto me with a mighty voice, saying: Go forth and say unto this people—Repent, for except ye repent ye can in nowise inherit the kingdom of heaven.

And again I say unto you, the Spirit saith: Behold, the ax is laid at the root of the tree; therefore every tree that bringeth not forth good fruit shall be hewn down and cast into the fire, yea, a fire which cannot be consumed, even an unquenchable fire. Behold, and remember, the Holy One hath spoken it.

And now my beloved brethren, I say unto you, can ye withstand these sayings; yea, can ye lay aside these things, and trample the Holy One under your feet; yea, can ye be puffed up in the pride of your hearts; yea, will ye still persist in the wearing of costly apparel and setting your hearts upon the vain things of the world, upon your riches?

Yea, will ye persist in supposing that ye are better one than another; yea, will ye persist in the persecution of your brethren, who humble themselves and do walk after the holy order of God, wherewith they have been brought into this church, having been sanctified by the Holy Spirit, and they do bring forth works which are meet for repentance—

Yea, and will you persist in turning your backs upon the poor, and the needy, and in withholding your substance from them?

And finally, all ye that will persist in your wickedness, I say unto you that these are they who shall be hewn down and cast into the fire except they speedily repent.

And now I say unto you, all you that are desirous to follow the voice of the good shepherd, come ye out from the wicked, and be ye separate, and touch not their unclean things; and behold, their names shall be blotted out, that the names of the wicked shall not be numbered among the names of the righteous, that the word of God may be fulfilled, which saith: The names of the wicked shall not be mingled with the names of my people;

๕๙ ເພາະວ່າເຮົາຈະຂຽນຊື່ຂອງຄົນຊອບທຳໄວ້ໃນ ທະບຽນແຫ່ງ ຊີວິດ, ແລະ ເຮົາຈະມອບມູນມໍລະດົກໃຫ້ແກ່ພວກເຂົາທາງຂວາ ມືຂອງເຮົາ. ແລະ ບັດນີ້, ພີ່ນ້ອງຂອງຂ້າພະເຈົ້າ, ພວກທ່ານມີ ອັນໃດແດ່ທີ່ຈະກ່າວຄັດຄ້ານໃນເລື່ອງນີ້? ຂ້າພະເຈົ້າກ່າວກັບ ພວກທ່ານວ່າ, ຖ້າຫາກພວກທ່ານເວົ້າຄັດຄ້ານ, ມັນກໍບໍ່ເປັນ ປະໂຫຍດຫຍັງ, ເພາະພຣະຄຳຂອງພຣະເຈົ້າຕ້ອງສຳເລັດຢ່າງ ແນ່ນອນ.

For the names of the righteous shall be written in the book of life, and unto them will I grant an inheritance at my right hand. And now, my brethren, what have ye to say against this? I say unto you, if ye speak against it, it matters not, for the word of God must be fulfilled.

๕๗ ເພາະມີຜູ້ລ້ຽງຄົນໃດແດ່ໃນບັນດາພວກທ່ານທີ່ມີແກະ ຫລາຍໂຕ ແຕ່ບໍ່ຄອຍເຝົ້າມັນ, ເພື່ອໝາປ່າຈະບໍ່ເຂົ້າມາກິນຝູງ ແກະຂອງລາວ? ແລະ ຈົ່ງເບິ່ງ, ຖ້າຫາກໝາປ່າເຂົ້າມາຫາຝູງ ແກະຂອງລາວ, ລາວຈະບໍ່ໄລ່ມັນອອກໄປບໍ? ແທ້ຈິງແລ້ວ, ແລະ ໃນທີ່ສຸດ, ຖ້າຫາກລາວເຮັດໄດ້, ລາວກໍຈະທຳລາຍມັນເສຍ.

For what shepherd is there among you having many sheep doth not watch over them, that the wolves enter not and devour his flock? And behold, if a wolf enter his flock doth he not drive him out? Yea, and at the last, if he can, he will destroy him.

๗๐ ແລະ ບັດນີ້ ຂ້າພະເຈົ້າກ່າວກັບພວກທ່ານວ່າ ຜູ້ລ້ຽງທີ່ດີໄດ້ ເອີ້ນຫາພວກທ່ານຢູ່; ແລະ ຖ້າຫາກພວກທ່ານຈະເຊື່ອຟັງສຸ ລະສຽງຂອງພຣະອົງ, ພຣະອົງຈະນຳພວກທ່ານເຂົ້າຝູງຂອງ ພຣະອົງ, ແລະ ພວກທ່ານຈະເປັນແກະຂອງພຣະອົງ; ແລະ ພຣະອົງຈະກ່າວກັບພວກທ່ານວ່າ ໝາປ່າທີ່ຫິວໂຫຍຈະບໍ່ ສາມາດເຂົ້າມາທຳຮ້າຍພວກທ່ານໄດ້ເລີຍ, ເພື່ອພວກທ່ານຈະ ບໍ່ຖືກທຳລາຍ.

And now I say unto you that the good shepherd doth call after you; and if you will hearken unto his voice he will bring you into his fold, and ye are his sheep; and he commandeth you that ye suffer no ravenous wolf to enter among you, that ye may not be destroyed.

๗๑ ແລະ ບັດນີ້ຂ້າພະເຈົ້າແອວມາຂໍສັ່ງພວກທ່ານດ້ວຍພາສາ ຂອງ ພຣະອົງຜູ້ໄດ້ບັນຊາຂ້າພະເຈົ້າ, ໃຫ້ພວກທ່ານຍຶດຖື ປະຕິບັດຕາມຄຳທີ່ຂ້າພະເຈົ້າໄດ້ເວົ້າກັບພວກທ່ານ.

And now I, Alma, do command you in the language of him who hath commanded me, that ye observe to do the words which I have spoken unto you.

๗๘ ຂ້າພະເຈົ້າເວົ້າເປັນຄຳສັ່ງກັບພວກທ່ານຜູ້ເປັນຂອງ ສາດສະໜາຈັກ; ແລະ ກັບຜູ້ທີ່ບໍ່ໄດ້ເປັນຂອງສາດສະໜາຈັກ ຂ້າພະເຈົ້າເວົ້າເປັນການເຊື້ອເຊີນ, ມີຄວາມວ່າ: ຈົ່ງມາ ແລະ ຮັບ ບັບຕິສະມາໄວ້ກັບການກັບໃຈ, ເພື່ອພວກທ່ານຈະໄດ້ເປັນຜູ້ຮັບ ສ່ວນໝາກໄມ້ຈາກ ຕົ້ນໄມ້ແຫ່ງຊີວິດ.

I speak by way of command unto you that belong to the church; and unto those who do not belong to the church I speak by way of invitation, saying: Come and be baptized unto repentance, that ye also may be partakers of the fruit of the tree of life.

ແອວມາ ๖

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກແອວມາໄດ້ເວົ້າ
ກັບຜູ້ຄົນຂອງສາດສະໜາຈັກ ຊຶ່ງຖືກສະຖາປະນາຂຶ້ນໃນເມືອງ
ເຊຣາເຮັມລາແລ້ວ, ເພິ່ນໄດ້ ແຕ່ງຕັ້ງໃຫ້ມີປະໂລຫິດ ແລະ ແອວ
ເດີໂດຍວາງ ມືຂອງເພິ່ນ ໃສ່ຕາມລະບຽບຂອງພຣະເຈົ້າ ເພື່ອ
ໃຫ້ເປັນປະທານ ແລະ ດູແລສາດສະໜາຈັກ.

๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ໃດກໍຕາມທີ່ບໍ່ໄດ້ເປັນຂອງ
ສາດສະໜາຈັກແຕ່ກັບໃຈຈາກບາບຂອງຕົນ ແລ້ວ ຮັບ
ບັບຕິສະມາໄວ້ກັບການກັບໃຈ, ຜູ້ນັ້ນກໍຖືກຮັບເຂົ້າຢູ່ໃນ
ສາດສະໜາຈັກ.

๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ໃດກໍຕາມທີ່ເປັນຂອງ
ສາດສະໜາຈັກທີ່ບໍ່ ກັບໃຈຈາກຄວາມຊົ່ວຮ້າຍຂອງຕົນ ແລະ
ຖ່ອມຕົວຕໍ່ພຣະພັກຂອງພຣະເຈົ້າ ຂ້າພະເຈົ້າໝາຍເຖິງຜູ້ທີ່ລະ
ເມີເພີ້ຝັນດ້ວຍ ຄວາມທະນົງໃຈ ຄົນເຫລົ່ານັ້ນຍ່ອມຖືກ
ປະຕິເສດ, ແລະ ຊື່ຂອງພວກເຂົາຖືກ ລຶບອອກ ແລະ ຊື່ຂອງ
ພວກເຂົາບໍ່ໄດ້ຖືກນັບເຂົ້າຢູ່ໃນບັນດາຊື່ຂອງຄົນທີ່ຊອບທຳ.

๔ ແລະ ພວກເຂົາເລີ່ມສະຖາປະນາລະບຽບຂອງສາດສະໜາ
ຈັກຂຶ້ນແນວນີ້ໃນເມືອງເຊຣາເຮັມລາ.

๕ ບັດນີ້ຂ້າພະເຈົ້າຢາກໃຫ້ພວກທ່ານເຂົ້າໃຈว່າ ພຣະຄຳຂອງ
ພຣະເຈົ້າເພື່ອແຜ່ແກ່ຄົນທັງປວງເພື່ອຈະບໍ່ໃຫ້ມີຜູ້ໃດຖືກຕັດ
ສິດທີ່ຈະມາຊຸມນຸມກັນເພື່ອຟັງພຣະຄຳຂອງພຣະເຈົ້າ.

๖ ເຖິງຢ່າງໃດກໍຕາມ ລູກໆຂອງພຣະເຈົ້າຍັງໄດ້ຮັບບັນຊາວ່າ
ພວກເຂົາຄວນມາເຕົ້າໂຮມກັນເລື້ອຍໆ ແລະ ຮ່ວມກັນ ຖືສິນອົດ
ເຂົ້າ ແລະ ອະທິຖານຢ່າງສຸດກຳລັງເພື່ອຄວາມຜາສຸກຂອງ
ຈິດວິນຍານຂອງຜູ້ທີ່ບໍ່ຮູ້ຈັກພຣະເຈົ້າ.

๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາແອວມາໄດ້ວາງ
ຂໍ້ບັງຄັບແລ້ວ ເພິ່ນກໍໄດ້ອຳລາພວກເຂົາໄປ, ແທ້ຈິງແລ້ວ, ເພິ່ນ
ໄດ້ຈາກສາດສະໜາຈັກທີ່ຢູ່ໃນເມືອງເຊຣາເຮັມລາໄປ, ແລະ
ຂ້າມໄປທາງຕາເວັນອອກຂອງແມ່ນ້ຳຊີໂດນ, ເຂົ້າໄປໃນ ຮ່ອມພູ
ກີເດໂອນທີ່ມີເມືອງສ້າງໄວ້, ຊຶ່ງມີຊື່ວ່າ ເມືອງກີເດໂອນ, ຊຶ່ງຕັ້ງ
ຢູ່ໃນຮ່ອມພູທີ່ມີຊື່ວ່າ ກີເດໂອນ, ຕາມຊື່ຂອງກີເດໂອນຜູ້ທີ່ຖືກ
ຂ້າຕາຍດ້ວຍດາບຂອງນີໂຮ.

Alma 6

And now it came to pass that after Alma had made an end of speaking unto the people of the church, which was established in the city of Zarahemla, he ordained priests and elders, by laying on his hands according to the order of God, to preside and watch over the church.

And it came to pass that whosoever did not belong to the church who repented of their sins were baptized unto repentance, and were received into the church.

And it also came to pass that whosoever did belong to the church that did not repent of their wickedness and humble themselves before God—I mean those who were lifted up in the pride of their hearts—the same were rejected, and their names were blotted out, that their names were not numbered among those of the righteous.

And thus they began to establish the order of the church in the city of Zarahemla.

Now I would that ye should understand that the word of God was liberal unto all, that none were deprived of the privilege of assembling themselves together to hear the word of God.

Nevertheless the children of God were commanded that they should gather themselves together oft, and join in fasting and mighty prayer in behalf of the welfare of the souls of those who knew not God.

And now it came to pass that when Alma had made these regulations he departed from them, yea, from the church which was in the city of Zarahemla, and went over upon the east of the river Sidon, into the valley of Gideon, there having been a city built, which was called the city of Gideon, which was in the valley that was called Gideon, being called after the man who was slain by the hand of Nehor with the sword.

ᄒ ແລະ ແອວມາໄດ້ໄປ ແລະ ເລີ່ມປະກາດພຣະຄຳຂອງ
ພຣະເຈົ້າໃຫ້ສາດສະໜາຈັກ ຊຶ່ງໄດ້ສະຖາປະນາຂຶ້ນໃນຮ່ອມພູ
ກີເດໂອນ, ອັນເປັນໄປຕາມການເປີດເຜີຍຂອງຄວາມຈິງໃນຄຳ
ເວົ້າທີ່ບັນພະບຸລຸດຂອງເພີ່ນໄດ້ເວົ້າໄວ້ ແລະ ຕາມພຣະວິນຍານ
ແຫ່ງການທຳນາຍຊຶ່ງມີຢູ່ກັບເພີ່ນ ຕາມ ປະຈັກພະຍານເຖິງ
ພຣະເຢຊູຄຣິດພຣະບຸດຂອງພຣະເຈົ້າຜູ້ຈະສະເດັດມາໄຖ່ຜູ້ຄົນ
ຂອງພຣະອົງຈາກບາບຂອງພວກເຂົາ, ແລະ ຕາມຖານະອັນ
ສັກສິດນີ້ ຊຶ່ງໂດຍຖານະນີ້ທີ່ເພີ່ນຖືກເອີ້ນ. ແລະ ມີຂຽນໄວ້
ດັ່ງນັ້ນ. ອາແມນ.

And Alma went and began to declare the word of God unto the church which was established in the valley of Gideon, according to the revelation of the truth of the word which had been spoken by his fathers, and according to the spirit of prophecy which was in him, according to the testimony of Jesus Christ, the Son of God, who should come to redeem his people from their sins, and the holy order by which he was called. And thus it is written. Amen.

ຄຳເວົ້າຂອງແອວມາ ຊຶ່ງເພິ່ນໄດ້ກ່າວກັບຜູ້ຄົນໃນເມືອງ ກີເດໂອນຕາມບັນທຶກຂອງເພິ່ນເອງ.

ແອວມາ ๗

๑ ຈົ່ງເບິ່ງ ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ເວລານີ້ຂ້າພະເຈົ້າ ໄດ້ຮັບອະນຸຍາດໃຫ້ມາຫາພວກທ່ານ, ສະນັ້ນ ຂ້າພະເຈົ້າຈຶ່ງ ພະຍາຍາມທີ່ຈະ ເວົ້າກັບພວກທ່ານໃນພາສາຂອງຂ້າພະເຈົ້າ ເອງ; ແທ້ຈິງແລ້ວ, ໂດຍປາກຂອງຂ້າພະເຈົ້າເອງ, ເວລານີ້ເປັນ ເທື່ອທຳອິດທີ່ຂ້າພະເຈົ້າໄດ້ເວົ້າກັບພວກທ່ານດ້ວຍຕົວເອງ, ຂ້າພະເຈົ້າເອງໄດ້ຖືກກັກຕົວໄວ້ກັບ ບັນລັງຕັດສິນ, ໂດຍມີ ທຸລະກິດອັນຈຳເປັນຊຶ່ງເຮັດໃຫ້ຂ້າພະເຈົ້າມາຫາພວກທ່ານບໍ່ ໄດ້.

๘ ແລະ ແມ່ນແຕ່ຕອນນີ້ຂ້າພະເຈົ້າກໍຄົງມາຫາພວກທ່ານບໍ່ໄດ້ ຖ້າຫາກຂ້າພະເຈົ້າບໍ່ໄດ້ ມອບບັນລັງຕັດສິນໄວ້ກັບຜູ້ອື່ນເພື່ອ ປົກຄອງແທນ; ແລະ ດ້ວຍພຣະເມດຕາອັນຫລວງຫລາຍ ພຣະ ຜູ້ເປັນເຈົ້າຈຶ່ງອະນຸຍາດໃຫ້ຂ້າພະເຈົ້າມາຫາພວກທ່ານ.

๙ ແລະ ຈົ່ງເບິ່ງ, ຂ້າພະເຈົ້າມາໂດຍມີຄວາມຫວັງອັນ ໃຫຍ່ຫລວງ ແລະ ມີຄວາມປາດຖະໜາຫລາຍທີ່ສຸດວ່າ ຂ້າພະເຈົ້າຈະເຫັນພວກທ່ານຖ່ອມຕົວຕໍ່ພຣະພັກຂອງ ພຣະເຈົ້າ, ແລະ ວ່າພວກທ່ານໄດ້ທູນຂໍພຣະຄຸນຂອງພຣະອົງຢູ່ ສະເໝີ, ວ່າຂ້າພະເຈົ້າຈະເຫັນພວກທ່ານບໍ່ມີຂໍ້ຕຳນິຕໍ່ພຣະພັກ ຂອງພຣະອົງ, ວ່າຂ້າພະເຈົ້າຈະເຫັນພວກທ່ານບໍ່ໄດ້ຄົກຢູ່ໃນ ສະຖານະການອັນເປັນຕາຢ້ານດັ່ງທີ່ພີ່ນ້ອງຂອງພວກເຮົາເປັນ ຢູ່ໃນເຊຣາເຮັມລາ.

๔ ຂໍພຣະນາມຂອງພຣະເຈົ້າຈົ່ງພຣະກະເສີມສຳລານເຖີດ, ທີ່ ພຣະອົງໄດ້ປະທານໃຫ້ຂ້າພະເຈົ້າຮູ້ຈັກ, ແທ້ຈິງແລ້ວ, ໄດ້ ປະທານຄວາມຊື່ນຊົມຢ່າງລົ້ນເຫລືອໃຫ້ແກ່ຂ້າພະເຈົ້າທີ່ຮູ້ຈັກ ວ່າ ພວກເຂົາໄດ້ສະຖາປະນາຂຶ້ນຢູ່ໃນທາງແຫ່ງຄວາມຊອບທຳ ຂອງພຣະອົງອີກ.

๕ ແລະ ຂ້າພະເຈົ້າວາງໃຈຕາມພຣະວິນຍານຂອງພຣະເຈົ້າຊຶ່ງ ຢູ່ກັບຂ້າພະເຈົ້າ, ວ່າຂ້າພະເຈົ້າຈະມີຄວາມຊື່ນຊົມໃນພວກທ່ານ ນຳອີກ; ເຖິງຢ່າງໃດກໍຕາມ ຂ້າພະເຈົ້າບໍ່ປາດຖະໜາວ່າ ຄວາມ ຊື່ນຊົມຂອງຂ້າພະເຈົ້າໃນພວກທ່ານຈະເກີດຂຶ້ນໂດຍສາເຫດ ຈາກຄວາມທຸກ ແລະ ຄວາມເສົ້າສະຫລົດໃຈທີ່ສຸດ ຊຶ່ງ ຂ້າພະເຈົ້າເຄີຍມີກັບພີ່ນ້ອງທີ່ເຊຣາເຮັມລາ, ເພາະຈົ່ງເບິ່ງ, ຄວາມຊື່ນຊົມຂອງຂ້າພະເຈົ້າເກີດກັບພວກເຂົາຫລັງຈາກທີ່ ຂ້າພະເຈົ້າໄດ້ທ່ອງທ່ຽວໄປດ້ວຍຄວາມທຸກ ແລະ ເສົ້າ ສະຫລົດໃຈມາຫລາຍແລ້ວ.

The words of Alma which he delivered to the people in Gideon, according to his own record.

Alma 7

Behold my beloved brethren, seeing that I have been permitted to come unto you, therefore I attempt to address you in my language; yea, by my own mouth, seeing that it is the first time that I have spoken unto you by the words of my mouth, I having been wholly confined to the judgment-seat, having had much business that I could not come unto you.

And even I could not have come now at this time were it not that the judgment-seat hath been given to another, to reign in my stead; and the Lord in much mercy hath granted that I should come unto you.

And behold, I have come having great hopes and much desire that I should find that ye had humbled yourselves before God, and that ye had continued in the supplicating of his grace, that I should find that ye were blameless before him, that I should find that ye were not in the awful dilemma that our brethren were in at Zarahemla.

But blessed be the name of God, that he hath given me to know, yea, hath given unto me the exceedingly great joy of knowing that they are established again in the way of his righteousness.

And I trust, according to the Spirit of God which is in me, that I shall also have joy over you; nevertheless I do not desire that my joy over you should come by the cause of so much afflictions and sorrow which I have had for the brethren at Zarahemla, for behold, my joy cometh over them after wading through much affliction and sorrow.

ຜ ແຕ່ຈົ່ງເບິ່ງ, ຂ້າພະເຈົ້າວາງໃຈວ່າ ພວກທ່ານບໍ່ຢູ່ໃນສະພາບ ບໍ່ເຊື່ອຖືດັ່ງທີ່ພີ່ນ້ອງຂອງພວກທ່ານໄດ້ເປັນມາແລ້ວ; ຂ້າພະເຈົ້າວາງໃຈວ່າ ພວກທ່ານບໍ່ລະເມີເພີ້ຝັນດ້ວຍຄວາມ ທະນົງໃຈ; ແທ້ຈິງແລ້ວ, ຂ້າພະເຈົ້າວາງໃຈວ່າ ພວກທ່ານບໍ່ໄດ້ ໝົກໝຸ້ນຢູ່ກັບຂອງມີຄ່າ ແລະ ສິ່ງທີ່ບໍ່ມີປະໂຫຍດຂອງໂລກ; ແທ້ຈິງແລ້ວ, ຂ້າພະເຈົ້າວາງໃຈວ່າ ພວກທ່ານບໍ່ໄດ້ກາບໄຫວ້ ຮູບບູຊາ, ແຕ່ພວກທ່ານໄດ້ກາບໄຫວ້ ພຣະເຈົ້າອົງທ່ຽງແທ້ ແລະ ຊົງພຣະຊົນຢູ່, ແລະ ວ່າພວກທ່ານມຸ້ງຫາການປົດບາບ ຂອງພວກທ່ານດ້ວຍສັດທາອັນເປັນນິດ, ຊຶ່ງຈະມາເຖິງ.

ກ ເພາະຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ມີຫລາຍສິ່ງ ຫລາຍຢ່າງທີ່ຈະມາເຖິງ; ແລະ ຈົ່ງເບິ່ງ, ມີຢ່າງໜຶ່ງທີ່ສຳຄັນ ກວ່າໝູ່ໝົດ—ເພາະຈົ່ງເບິ່ງ, ເວລາຢູ່ບໍ່ໄກທີ່ພຣະຜູ້ໄຖ່ຈະມີ ຊີວິດ ແລະ ຈະສະເດັດມາໃນບັນດາຜູ້ຄົນຂອງພຣະອົງ.

ຂ ຈົ່ງເບິ່ງ, ຂ້າພະເຈົ້າບໍ່ໄດ້ກ່າວວ່າ ພຣະອົງຈະສະເດັດມາໃນ ບັນດາພວກເຮົາໃນເວລາທີ່ພຣະອົງຢູ່ໃນຮ່າງກາຍທີ່ເປັນມະຕະ ຂອງພຣະອົງ; ເພາະຈົ່ງເບິ່ງ, ພຣະວິນຍານບໍ່ໄດ້ບອກ ຂ້າພະເຈົ້າວ່າ ເລື່ອງລາວຈະເປັນໄປແນວນີ້. ບັດນີ້ສຳລັບເລື່ອງ ນີ້ຂ້າພະເຈົ້າບໍ່ຮູ້ຈັກ, ແຕ່ເທົ່າທີ່ຂ້າພະເຈົ້າຮູ້ຄື ອົງພຣະຜູ້ເປັນ ເຈົ້າມີອຳນາດທີ່ຈະກະທຳທຸກສິ່ງທຸກຢ່າງຊຶ່ງເປັນໄປຕາມ ພຣະຄຳຂອງພຣະອົງ.

ຄ ແຕ່ຈົ່ງເບິ່ງ, ພຣະວິນຍານໄດ້ກ່າວກັບຂ້າພະເຈົ້າພຽງເທົ່ານີ້, ມີຄວາມວ່າ: ຈົ່ງຮ້ອງບອກຜູ້ຄົນພວກນີ້ວ່າ—ເຈົ້າຈົ່ງ ກັບໃຈ ເຖີດ, ແລະ ຕຽມທາງຂອງພຣະຜູ້ເປັນເຈົ້າ, ແລະ ເດີນໃນທາງ ຂອງພຣະອົງທີ່ຊື່ຕົງ; ເພາະຈົ່ງເບິ່ງ, ອານາຈັກສະຫວັນໃກ້ ເຂົ້າມາເຖິງແລ້ວ, ແລະ ພຣະບຸດຂອງພຣະເຈົ້າຈະສະເດັດ ມາ ຍັງຜືນແຜ່ນດິນໂລກ.

ງ ແລະ ຈົ່ງເບິ່ງ, ພຣະອົງຈະ ກຳເນີດຈາກ ນາງມາຣີທີ່ ເຢຣູຊາເລັມ ຊຶ່ງເປັນ ແຜ່ນດິນຂອງບັນພະບຸລຸດຂອງພວກເຮົາ, ນາງເປັນ ຍິງບໍລິສຸດ, ເປັນພາຊະນະທີ່ປະເສີດ ແລະ ຖືກເລືອກ ໄວ້ແລ້ວ, ຜູ້ທີ່ຈະ ຕັ້ງທ້ອງໂດຍອຳນາດຂອງພຣະວິນຍານ ບໍລິສຸດ, ແລະ ໃຫ້ກຳເນີດລູກຊາຍຜູ້ໜຶ່ງ, ແທ້ຈິງແລ້ວ, ແມ່ນ ແຕ່ພຣະບຸດຂອງພຣະເຈົ້າ.

ຈ ແລະ ພຣະອົງຈະສະເດັດອອກໄປ, ທົນຕໍ່ຄວາມເຈັບປວດ ແລະ ຄວາມທຸກ ແລະ ການລໍ້ລວງທຸກຢ່າງ; ແລະ ນີ້ກໍເພື່ອຄຳ ເວົ້າຈະໄດ້ສຳເລັດຊຶ່ງໄດ້ກ່າວໄວ້ວ່າ ພຣະອົງຈະຮັບເອົາຄວາມ ເຈັບປວດ ແລະ ຄວາມປ່ວຍໄຂ້ຂອງຜູ້ຄົນຂອງພຣະອົງ.

But behold, I trust that ye are not in a state of so much unbelief as were your brethren; I trust that ye are not lifted up in the pride of your hearts; yea, I trust that ye have not set your hearts upon riches and the vain things of the world; yea, I trust that you do not worship idols, but that ye do worship the true and the living God, and that ye look forward for the remission of your sins, with an everlasting faith, which is to come.

For behold, I say unto you there be many things to come; and behold, there is one thing which is of more importance than they all—for behold, the time is not far distant that the Redeemer liveth and cometh among his people.

Behold, I do not say that he will come among us at the time of his dwelling in his mortal tabernacle; for behold, the Spirit hath not said unto me that this should be the case. Now as to this thing I do not know; but this much I do know, that the Lord God hath power to do all things which are according to his word.

But behold, the Spirit hath said this much unto me, saying: Cry unto this people, saying—Repent ye, and prepare the way of the Lord, and walk in his paths, which are straight; for behold, the kingdom of heaven is at hand, and the Son of God cometh upon the face of the earth.

And behold, he shall be born of Mary, at Jerusalem which is the land of our forefathers, she being a virgin, a precious and chosen vessel, who shall be overshadowed and conceive by the power of the Holy Ghost, and bring forth a son, yea, even the Son of God.

And he shall go forth, suffering pains and afflictions and temptations of every kind; and this that the word might be fulfilled which saith he will take upon him the pains and the sicknesses of his people.

ຕ ແລະ ພຣະອົງຈະຮັບເອົາ ຄວາມຕາຍ ເພື່ອພຣະອົງຈະໄດ້ ເຮັດໃຫ້ສາຍຮັດແຫ່ງຄວາມຕາຍຊຶ່ງຜູກມັດຜູ້ຄົນຂອງພຣະອົງ ຫລຸດອອກ; ແລະ ພຣະອົງຈະຮັບເອົາຄວາມບົກພ່ອງຂອງ ພວກເຂົາ ເພື່ອອຸທອນຂອງພຣະອົງຈະເຕັມໄປດ້ວຍຄວາມ ເມດຕາຕາມທາງຂອງເນື້ອໜັງ ເພື່ອພຣະອົງຈະຮູ້ຈັກຕາມ ທາງຂອງເນື້ອໜັງວ່າ ຈະ ຊ່ວຍເຫລືອຜູ້ຄົນຂອງພຣະອົງຕາມ ຄວາມບົກພ່ອງຂອງພວກເຂົາໄດ້ແນວໃດ.

And he will take upon him death, that he may loose the bands of death which bind his people; and he will take upon him their infirmities, that his bowels may be filled with mercy, according to the flesh, that he may know according to the flesh how to succor his people according to their infirmities.

ຖ ບັດນີ້ພຣະວິນຍານ ຮູ້ຈັກທຸກສິ່ງ; ເຖິງຢ່າງໃດກໍຕາມ ພຣະບຸດຂອງພຣະເຈົ້າຍັງຮັບທຸກທໍລະມານຕາມທາງຂອງເນື້ອ ໜັງ ເພື່ອພຣະອົງຈະໄດ້ ຮັບເອົາບາບຂອງຜູ້ຄົນຂອງພຣະອົງ, ເພື່ອພຣະອົງຈະໄດ້ລຶບການລ່ວງລະເມີດຂອງພວກເຂົາຕາມ ອຳນາດແຫ່ງການປົດປ່ອຍຂອງພຣະອົງ; ແລະ ບັດນີ້ຈົ່ງເບິ່ງ, ນີ້ຄືປະຈັກພະຍານທີ່ມີຢູ່ໃນຂ້າພະເຈົ້າ.

Now the Spirit knoweth all things; nevertheless the Son of God suffereth according to the flesh that he might take upon him the sins of his people, that he might blot out their transgressions according to the power of his deliverance; and now behold, this is the testimony which is in me.

ຖ ແລະ ບັດນີ້ຂ້າພະເຈົ້າກ່າວກັບພວກທ່ານວ່າ ພວກທ່ານ ຕ້ອງກັບໃຈ, ແລະ ເກີດໃໝ່; ເພາະວ່າພຣະວິນຍານໄດ້ກ່າວໄວ້ ວ່າ ຖ້າຫາກພວກທ່ານບໍ່ເກີດໃໝ່ ພວກທ່ານຈະບໍ່ໄດ້ຮັບ ອານາຈັກສະຫວັນມາເປັນມູນມໍລະດົກ; ສະນັ້ນ ຈົ່ງມາເຖີດ ມາ ຮັບບັບຕິສະມາໄວ້ກັບການກັບໃຈ, ເພື່ອພວກທ່ານຈະຖືກລ້າງ ຈາກບາບຂອງພວກທ່ານ, ເພື່ອພວກທ່ານຈະມີສັດທາໃນ ພຣະເມສານ້ອຍຂອງພຣະເຈົ້າຜູ້ເອົາບາບຂອງໂລກໄປ, ຜູ້ຊົ່ວ ລິດອຳນາດຍິ່ງໃຫຍ່ຈະຊ່ວຍໃຫ້ລອດ ແລະ ຈະຊຳລະລ້າງຈາກ ຄວາມບໍ່ຊອບທຳທັງໝົດ.

Now I say unto you that ye must repent, and be born again; for the Spirit saith if ye are not born again ye cannot inherit the kingdom of heaven; therefore come and be baptized unto repentance, that ye may be washed from your sins, that ye may have faith on the Lamb of God, who taketh away the sins of the world, who is mighty to save and to cleanse from all unrighteousness.

ຖ ແທ້ຈິງແລ້ວ, ຂ້າພະເຈົ້າກ່າວກັບພວກທ່ານວ່າ, ຈົ່ງມາເຖີດ, ຢ່າສູ່ຢ້ານ, ຈົ່ງປະຖິ້ມບາບທຸກຢ່າງທີ່ ກີດກັນພວກທ່ານໄວ້ ຢ່າງງ່າຍດາຍ, ຊຶ່ງບາບນັ້ນຜູກມັດພວກທ່ານລົງໄປສູ່ຄວາມ ພິນາດ, ແທ້ຈິງແລ້ວ, ຈົ່ງມາເຖີດ, ແລະ ອອກໄປສະແດງຕໍ່ ພຣະເຈົ້າຂອງພວກທ່ານວ່າ ພວກທ່ານເຕັມໃຈທີ່ຈະກັບໃຈ ຈາກບາບຂອງພວກທ່ານ, ແລະ ເຂົ້າເຮັດພັນທະສັນຍາກັບ ພຣະອົງທີ່ຈະຮັກສາພຣະບັນຍັດຂອງພຣະອົງ, ແລະ ເປັນ ພະຍານເຖິງສິ່ງນັ້ນຕໍ່ພຣະອົງໃນມື້ນີ້ໂດຍການລົງໄປໃນນ້ຳ ແຫ່ງບັບຕິສະມາ.

Yea, I say unto you come and fear not, and lay aside every sin, which easily doth beset you, which doth bind you down to destruction, yea, come and go forth, and show unto your God that ye are willing to repent of your sins and enter into a covenant with him to keep his commandments, and witness it unto him this day by going into the waters of baptism.

ຖ ແລະ ຜູ້ໃດກໍຕາມທີ່ເຮັດຕາມນີ້, ແລະ ຮັກສາພຣະບັນຍັດ ຂອງພຣະເຈົ້ານັບແຕ່ເວລານີ້ເປັນຕົ້ນໄປ, ຜູ້ນັ້ນຈະຈື່ຈຳສິ່ງທີ່ ຂ້າພະເຈົ້າເວົ້າກັບເຂົາ, ແທ້ຈິງແລ້ວ, ເຂົາຈະຈື່ຈຳສິ່ງທີ່ ຂ້າພະເຈົ້າໄດ້ເວົ້າກັບເຂົາ, ເຂົາຈະມີຊີວິດນິລັນດອນອີງຕາມ ປະຈັກພະຍານຂອງພຣະວິນຍານສັກສິດ ຊຶ່ງເປັນພະຍານໃນ ຂ້າພະເຈົ້າ.

And whosoever doeth this, and keepeth the commandments of God from thenceforth, the same will remember that I say unto him, yea, he will remember that I have said unto him, he shall have eternal life, according to the testimony of the Holy Spirit, which testifieth in me.

ແລະ ບັດນີ້ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ພວກທ່ານ
ເຊື່ອໃນເລື່ອງເຫລົ່ານີ້ບໍ່? ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກ
ທ່ານວ່າ, ແທ້ຈິງແລ້ວ, ຂ້າພະເຈົ້າຮູ້ວ່າພວກທ່ານເຊື່ອສິ່ງເຫລົ່ານ
ນີ້ ແລະ ເຫດຜົນທີ່ຂ້າພະເຈົ້າຮູ້ ວ່າພວກທ່ານເຊື່ອເພາະໂດຍ
ການສະແດງໃຫ້ປະຈັກຂອງພຣະວິນຍານຊຶ່ງຢູ່ໃນຂ້າພະເຈົ້າ.
ແລະ ບັດນີ້ເພາະວ່າສັດທາຂອງພວກທ່ານເຂັ້ມແຂງກ່ຽວກັບ
ເລື່ອງນີ້, ແທ້ຈິງແລ້ວ, ກ່ຽວກັບເລື່ອງທີ່ຂ້າພະເຈົ້າໄດ້ເວົ້າມາ,
ຂ້າພະເຈົ້າຈຶ່ງມີຄວາມສຸກຢ່າງລົ້ນເຫລືອ.

ດັ່ງທີ່ຂ້າພະເຈົ້າໄດ້ເວົ້າກັບພວກທ່ານມາແລ້ວຕັ້ງແຕ່ຕົ້ນ, ວ່າ
ຂ້າພະເຈົ້າປາດຖະໜາຫລາຍທີ່ສຸດທີ່ຈະບໍ່ໃຫ້ພວກທ່ານຕົກ
ຢູ່ໃນສະຖານະການທີ່ໜ້າຢ້ານກົວດັ່ງທີ່ພີ່ນ້ອງຂອງພວກທ່ານ
ເປັນຢູ່, ເຖິງແມ່ນດັ່ງນີ້ ຂ້າພະເຈົ້າກໍເຫັນວ່າສົມຄວາມ
ປາດຖະໜາຂອງຂ້າພະເຈົ້າແລ້ວ.

ເພາະວ່າຂ້າພະເຈົ້າເຫັນວ່າພວກທ່ານຢູ່ໃນທາງອັນ
ຊອບທຳ; ຂ້າພະເຈົ້າເຫັນວ່າພວກທ່ານຢູ່ໃນທາງຊຶ່ງຈະນຳໄປ
ສູ່ອານາຈັກຂອງພຣະເຈົ້າ; ແທ້ຈິງແລ້ວ, ຂ້າພະເຈົ້າເຫັນວ່າ
ພວກທ່ານກຳລັງເຮັດໃຫ້ ທາງຂອງພຣະອົງຊື່ຕົງ.

ຂ້າພະເຈົ້າເຫັນວ່າມັນຖືກເຮັດໃຫ້ເປັນທີ່ຮູ້ຈັກແກ່ພວກທ່ານ
ແລ້ວ, ໂດຍປະຈັກພະຍານແຫ່ງພຣະຄຳຂອງພຣະອົງ, ວ່າ
ພຣະອົງ ດຳເນີນໄປຕາມທາງຄົດບໍ່ໄດ້; ທັງບໍ່ປ່ຽນແປງຈາກສິ່ງ
ທີ່ພຣະອົງໄດ້ກ່າວໄວ້; ທັງບໍ່ມີເງົາຂອງການຫັນເຫຈາກຂວາ
ຫາຊ້າຍ, ຫລື ຈາກສິ່ງທີ່ຖືກຕ້ອງໄປຫາສິ່ງທີ່ບໍ່ຖືກຕ້ອງ;
ສະນັ້ນ, ເສັ້ນທາງເດີນຂອງພຣະອົງຈຶ່ງເປັນຮອບໜຶ່ງທີ່ເປັນ
ນິລັນດອນ.

ແລະ ພຣະອົງຈະບໍ່ສະຖິດຢູ່ໃນວິຫານທີ່ ບໍ່ສັກສິດ; ທັງບໍ່ຮັບ
ເອົາຄວາມສົກກະປົກ ຫລື ວ່າຫຍັງກໍຕາມທີ່ບໍ່ສະອາດເຂົ້າໄປ
ໃນອານາຈັກຂອງພຣະເຈົ້າເລີຍ; ສະນັ້ນຂ້າພະເຈົ້າກ່າວກັບ
ພວກທ່ານວ່າ ເວລາຈະມາເຖິງ, ແທ້ຈິງແລ້ວ, ມັນຈະເປັນໃນວັນ
ສຸດທ້າຍທີ່ຄົນ ສົກກະປົກຈະຄົງຢູ່ໃນຄວາມສົກກະປົກຂອງເຂົາ
ຕໍ່ໄປ.

ແລະ ບັດນີ້ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າໄດ້
ເວົ້າເລື່ອງເຫລົ່ານີ້ກັບພວກທ່ານເພື່ອຂ້າພະເຈົ້າຈະໄດ້ປຸກພວກ
ທ່ານໃຫ້ຮູ້ສຶກເຖິງໜ້າທີ່ຂອງພວກທ່ານຕໍ່ພຣະເຈົ້າ, ເພື່ອ
ພວກທ່ານຈະເດີນໄປໂດຍບໍ່ມີຂໍ້ຕຳນິຕໍ່ພຣະພັກຂອງພຣະອົງ,
ເພື່ອພວກທ່ານຈະເດີນໄປຕາມລະບຽບອັນສັກສິດຂອງ
ພຣະເຈົ້າຕາມທີ່ພວກທ່ານຮັບເອົາໄວ້.

And now my beloved brethren, do you believe these things? Behold, I say unto you, yea, I know that ye believe them; and the way that I know that ye believe them is by the manifestation of the Spirit which is in me. And now because your faith is strong concerning that, yea, concerning the things which I have spoken, great is my joy.

For as I said unto you from the beginning, that I had much desire that ye were not in the state of dilemma like your brethren, even so I have found that my desires have been gratified.

For I perceive that ye are in the paths of righteousness; I perceive that ye are in the path which leads to the kingdom of God; yea, I perceive that ye are making his paths straight.

I perceive that it has been made known unto you, by the testimony of his word, that he cannot walk in crooked paths; neither doth he vary from that which he hath said; neither hath he a shadow of turning from the right to the left, or from that which is right to that which is wrong; therefore, his course is one eternal round.

And he doth not dwell in unholy temples; neither can filthiness or anything which is unclean be received into the kingdom of God; therefore I say unto you the time shall come, yea, and it shall be at the last day, that he who is filthy shall remain in his filthiness.

And now my beloved brethren, I have said these things unto you that I might awaken you to a sense of your duty to God, that ye may walk blameless before him, that ye may walk after the holy order of God, after which ye have been received.

๘๓ ແລະ ບັດນີ້ຂ້າພະເຈົ້າຢາກໃຫ້ພວກທ່ານ ຖ່ອມຕົວ, ເປັນຄົນ ສອນງ່າຍ, ແລະ ອ່ອນโยน; ເຮັດຕາມຄຳຂໍร้ອງ; ເຕັມໄປດ້ວຍ ຄວາມອົດທົນ ແລະ ຄວາມອົດກັ້ນ; ຮູ້ຈັກຫ້ຳມຕົນເອງໃນທຸກ ສິ່ງທຸກຢ່ຳງ; ພາກພຽນໃນການຮັກສາພຣະບັນຍັດຂອງ ພຣະເຈົ້າຕະຫລອດເວລາ; ທູນຂໍສິ່ງໃດກໍຕາມທີ່ພວກທ່ານ ຕ້ອງການທັງທາງວິນຍານ ແລະ ທາງໂລກ; ຈົ່ງຖວາຍຄຳຂອບ ພຣະຄຸນແດ່ພຣະເຈົ້າສະເໝີໃນສິ່ງໃດກໍຕາມທີ່ພວກທ່ານໄດ້ ຮັບ.

And now I would that ye should be humble, and be submissive and gentle; easy to be entreated; full of patience and long-suffering; being temperate in all things; being diligent in keeping the commandments of God at all times; asking for whatsoever things ye stand in need, both spiritual and temporal; always returning thanks unto God for whatsoever things ye do receive.

๘๔ ແລະ ໃຫ້ເບິ່ງວ່າພວກທ່ານມີ ສັດທາ, ຄວາມຫວັງ, ແລະ ຄວາມໃຈບຸນ, ແລະ ເມື່ອນັ້ນພວກທ່ານຈະມີວຽກງານດີ ຫລວງຫລາຍສະເໝີໄປ.

And see that ye have faith, hope, and charity, and then ye will always abound in good works.

๘๕ ແລະ ຂໍໃຫ້ພຣະຜູ້ເປັນເຈົ້າໂປດປະທານພອນແກ່ພວກ ທ່ານ, ແລະ ຮັກສາອາພອນຂອງພວກທ່ານໃຫ້ປາດສະຈາກ ມົນທິນ, ເພື່ອໃນທີ່ສຸດພວກທ່ານຈະໄດ້ຖືກນຳໄປນັ່ງຮ່ວມກັບ ອັບຣາຮາມ, ອີຊາກ, ແລະ ຢາໂຄບ, ແລະ ສາດສະດາຜູ້ບໍລິສຸດ ຜູ້ເຄີຍເປັນຢູ່ນັບແຕ່ການເລີ່ມຕົ້ນຂອງໂລກ, ໂດຍໃຫ້ອາພອນ ຂອງພວກທ່ານປາດສະຈາກມົນທິນຄືກັບອາພອນຂອງພວກ ເພີ່ນທີ່ ປາດສະຈາກມົນທິນ, ຢູ່ໃນອານາຈັກສະຫວັນ ຊຶ່ງຈະບໍ່ ອອກໄປອີກ.

And may the Lord bless you, and keep your garments spotless, that ye may at last be brought to sit down with Abraham, Isaac, and Jacob, and the holy prophets who have been ever since the world began, having your garments spotless even as their garments are spotless, in the kingdom of heaven to go no more out.

๘๖ ແລະ ບັດນີ້ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າໄດ້ ເວົ້າຂໍ້ຄວາມເຫລົ່ານີ້ກັບພວກທ່ານຕາມພຣະວິນຍານຊຶ່ງໃຫ້ ຖ້ອຍຄຳໃນຂ້າພະເຈົ້າ; ແລະ ຈິດວິນຍານຂອງຂ້າພະເຈົ້າມີ ຄວາມປິຕິຍິນດີຢ່ຳງຍິ່ງເພາະຄວາມພາກພຽນ ແລະ ຄວາມ ເອົາໃຈໃສ່ຢ່ຳງຍິ່ງຂອງພວກທ່ານຕໍ່ຄຳເວົ້າຂອງຂ້າພະເຈົ້າ.

And now my beloved brethren, I have spoken these words unto you according to the Spirit which testifieth in me; and my soul doth exceedingly rejoice, because of the exceeding diligence and heed which ye have given unto my word.

๘๗ ແລະ ບັດນີ້, ຂໍໃຫ້ ສັນຕິສຸກຂອງພຣະເຈົ້າຈົ່ງສະຖິດຢູ່ກັບ ພວກທ່ານດ້ວຍເທີ້ນ, ແລະ ຢູ່ກັບເຮືອນຊານຂອງພວກທ່ານ ແລະ ຢູ່ກັບແຜ່ນດິນຂອງພວກທ່ານ, ແລະ ຢູ່ກັບຝູງສັດລ້ຽງ ແລະ ຝູງສັດໃຊ້ແຮງງານຂອງພວກທ່ານ, ແລະ ທຸກສິ່ງທຸກ ຢ່ຳງທີ່ພວກທ່ານເປັນເຈົ້າຂອງ, ທັງແມ່ຍິງຂອງພວກທ່ານ ແລະ ລູກໆຂອງພວກທ່ານອີງຕາມສັດທາ ແລະ ວຽກງານດີ ຂອງພວກທ່ານ, ນັບແຕ່ເວລານີ້ເປັນຕົ້ນໄປ ແລະ ຕະຫລອດ ການ. ແລະ ຂ້າພະເຈົ້າຂໍເວົ້າໄວ້ດັ່ງນີ້. ອາແມນ.

And now, may the peace of God rest upon you, and upon your houses and lands, and upon your flocks and herds, and all that you possess, your women and your children, according to your faith and good works, from this time forth and forever. And thus I have spoken. Amen.

ແອວມາ ໘

໑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ແອວມາກັບມາຈາກ
ແຜ່ນດິນກີເດໂອນຫລັງຈາກສິດສອນຜູ້ຄົນຂອງກີເດໂອນ
ຫລາຍເລື່ອງ ຊຶ່ງບໍ່ສາມາດຂຽນໄວ້ໄດ້, ໄດ້ສະຖາປະນາລະບຽບ
ຂອງສາດສະໜາຈັກຄືກັນກັບທີ່ເພິ່ນໄດ້ເຮັດມາກ່ອນແລ້ວໃນ
ແຜ່ນດິນເຊຣາເຮັມລາ, ແທ້ຈິງແລ້ວ, ເພິ່ນກັບຄືນມາບ້ານຂອງ
ເພິ່ນທີ່ເຊຣາເຮັມລາ ເພື່ອພັກຜ່ອນຈາກວຽກງານທີ່ເພິ່ນໄດ້
ເຮັດໄປນັ້ນ.

໒ ແລະ ປີທີເກົ້າແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນ
ຂອງນີໄຟໄດ້ສິ້ນສຸດລົງດັ່ງນີ້.

໓ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນຕົ້ນປີທີສິບແຫ່ງການ
ປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ, ຄືແອວມາໄດ້ອອກ
ຈາກເມືອງນັ້ນ ແລະ ໄດ້ອອກເດີນທາງຂ້າມໄປຫາແຜ່ນດິນມີ
ເລັກທາງຕາເວັນຕົກຂອງ ແມ່ນ້ຳຊີໂດນທາງຕາເວັນຕົກໃກ້ກັບ
ຊາຍແດນຂອງຖິ່ນແຫ້ງແລ້ງກັນດານ.

໔ ແລະ ເພິ່ນໄດ້ເລີ່ມສິດສອນໃນແຜ່ນດິນມີເລັກຕາມ ລະບຽບ
ອັນສັກສິດຂອງພຣະເຈົ້າ, ຊຶ່ງໂດຍຖານະນັ້ນເພິ່ນຖືກເອີ້ນ;
ແລະ ເພິ່ນເລີ່ມສິດສອນຜູ້ຄົນທົ່ວແຜ່ນດິນມີເລັກ.

໕ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນໄດ້ມາຫາເພິ່ນ
ຈາກທຸກບ່ອນຂອງແຜ່ນດິນ ຊຶ່ງຢູ່ໃກ້ກັບຖິ່ນແຫ້ງແລ້ງ
ກັນດານ. ແລະ ພວກເຂົາໄດ້ຮັບບັບຕິສະມາກັນທົ່ວແຜ່ນດິນ
ນັ້ນ;

໖ ສະນັ້ນຫລັງຈາກເພິ່ນສິ້ນສຸດວຽກງານຂອງເພິ່ນທີ່ມີເລັກ
ເພິ່ນໄດ້ອອກຈາກບ່ອນນັ້ນ, ແລະ ໄດ້ເດີນທາງສາມມື້ໄປທາງ
ເໜືອຂອງແຜ່ນດິນມີເລັກ; ແລະ ເພິ່ນໄດ້ມາຮອດເມືອງໜຶ່ງຊຶ່ງ
ມີຊື່ວ່າ ອຳໂມນໄນຮາ.

໗ ບັດນີ້ມັນເປັນທຳນຽມຂອງຜູ້ຄົນຂອງນີໄຟທີ່ຈະເອີ້ນຊື່
ແຜ່ນດິນ ຫລື ເມືອງຂອງພວກເຂົາ ແລະ ໝູ່ບ້ານຂອງພວກ
ເຂົາ, ແທ້ຈິງແລ້ວ, ແມ່ນແຕ່ໝູ່ບ້ານເລັກນ້ອຍທັງໝົດຂອງ
ພວກເຂົາຕາມຊື່ຂອງຜູ້ທີ່ເປັນເຈົ້າຂອງທຳອິດ; ແລະ ຈຶ່ງເປັນ
ເຊັ່ນດຽວກັນນີ້ກັບແຜ່ນດິນອຳໂມນໄນຮາ.

໘ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເວລາທີ່ແອວມາ
ມາຮອດເມືອງອຳໂມນໄນຮາ ເພິ່ນກໍໄດ້ເລີ່ມສັ່ງສອນພຣະຄຳ
ຂອງພຣະເຈົ້າໃຫ້ແກ່ຜູ້ຄົນເຫລົ່ານັ້ນ.

໙ ບັດນີ້ຊາຕານ ມີອຳນາດຫລາຍທີ່ສຸດເໜືອໃຈຂອງຜູ້ຄົນໃນ
ເມືອງອຳໂມນໄນຮານັ້ນ; ສະນັ້ນ ພວກເຂົາຈຶ່ງບໍ່ຍອມເຊື່ອຟັງ
ຄຳເວົ້າຂອງແອວມາເລີຍ.

Alma 8

And now it came to pass that Alma returned from the land of Gideon, after having taught the people of Gideon many things which cannot be written, having established the order of the church, according as he had before done in the land of Zarahemla, yea, he returned to his own house at Zarahemla to rest himself from the labors which he had performed.

And thus ended the ninth year of the reign of the judges over the people of Nephi.

And it came to pass in the commencement of the tenth year of the reign of the judges over the people of Nephi, that Alma departed from thence and took his journey over into the land of Melek, on the west of the river Sidon, on the west by the borders of the wilderness.

And he began to teach the people in the land of Melek according to the holy order of God, by which he had been called; and he began to teach the people throughout all the land of Melek.

And it came to pass that the people came to him throughout all the borders of the land which was by the wilderness side. And they were baptized throughout all the land;

So that when he had finished his work at Melek he departed thence, and traveled three days' journey on the north of the land of Melek; and he came to a city which was called Ammonihah.

Now it was the custom of the people of Nephi to call their lands, and their cities, and their villages, yea, even all their small villages, after the name of him who first possessed them; and thus it was with the land of Ammonihah.

And it came to pass that when Alma had come to the city of Ammonihah he began to preach the word of God unto them.

Now Satan had gotten great hold upon the hearts of the people of the city of Ammonihah; therefore they would not hearken unto the words of Alma.

Nevertheless Alma labored much in the spirit, wrestling with God in mighty prayer, that he would pour out his Spirit upon the people who were in the city; that he would also grant that he might baptize them unto repentance.

Nevertheless, they hardened their hearts, saying unto him: Behold, we know that thou art Alma; and we know that thou art high priest over the church which thou hast established in many parts of the land, according to your tradition; and we are not of thy church, and we do not believe in such foolish traditions.

And now we know that because we are not of thy church we know that thou hast no power over us; and thou hast delivered up the judgment-seat unto Nephihah; therefore thou art not the chief judge over us.

Now when the people had said this, and withstood all his words, and reviled him, and spit upon him, and caused that he should be cast out of their city, he departed thence and took his journey towards the city which was called Aaron.

And it came to pass that while he was journeying thither, being weighed down with sorrow, wading through much tribulation and anguish of soul, because of the wickedness of the people who were in the city of Ammonihah, it came to pass while Alma was thus weighed down with sorrow, behold an angel of the Lord appeared unto him, saying:

Blessed art thou, Alma; therefore, lift up thy head and rejoice, for thou hast great cause to rejoice; for thou hast been faithful in keeping the commandments of God from the time which thou receivedst thy first message from him. Behold, I am he that delivered it unto you.

And behold, I am sent to command thee that thou return to the city of Ammonihah, and preach again unto the people of the city; yea, preach unto them. Yea, say unto them, except they repent the Lord God will destroy them.

---

๑๐ ເຖິງຢ່າງໃດກໍຕາມແອວມາກໍ ເຮັດວຽກຢ່າງໜັກໃນທາງ ວິນຍານໂດຍ ຕໍ່ສູ້ກັບພຣະເຈົ້າດ້ວຍ ການອະທິຖານຢ່າງສຸດ ກຳລັງເພື່ອຂໍໃຫ້ພຣະອົງທຸ້ມເທພຣະວິນຍານຂອງພຣະອົງ ລົງມາເທິງຜູ້ຄົນຊຶ່ງຢູ່ໃນເມືອງນັ້ນ ເພື່ອພຣະອົງຈະອະນຸຍາດ ໃຫ້ເພີ່ນບັບຕິສະມາພວກເຂົາເຫລົ່ານັ້ນດ້ວຍການກັບໃຈ.

๑๑ ເຖິງຢ່າງໃດກໍຕາມ, ພວກເຂົາຍັງເຮັດໃຈແຂງກະດ້າງໂດຍ ເວົ້າກັບເພີ່ນວ່າ: ຈົ່ງເບິ່ງ, ພວກເຮົາຮູ້ຈັກວ່າທ່ານຄືແອວມາ ແລະ ພວກເຮົາຮູ້ວ່າ ທ່ານເປັນມະຫາປະໂລຫິດດູແລ ສາດສະໜາຈັກ ຊຶ່ງທ່ານໄດ້ສະຖາປະນາຂຶ້ນຫລາຍບ່ອນໃນ ແຜ່ນດິນຕາມປະເພນີຂອງທ່ານ, ແລະ ພວກເຮົາບໍ່ໄດ້ຢູ່ໃນ ສາດສະໜາຈັກຂອງທ່ານ, ແລະ ພວກເຮົາບໍ່ເຊື່ອຕາມຮີດຄອງ ປະເພນີອັນໂງ່ຈ້າເຊັ່ນນັ້ນ.

๑๒ ແລະ ບັດນີ້ພວກເຮົາຮູ້ວ່າ ຍ້ອນວ່າພວກເຮົາບໍ່ໄດ້ຢູ່ໃນ ສາດສະໜາຈັກຂອງທ່ານ ແລະ ພວກເຮົາຮູ້ວ່າ ທ່ານບໍ່ມີ ອຳນາດເໜືອພວກເຮົາ; ແລະ ທ່ານໄດ້ມອບບັນລັງຕັດສິນໃຫ້ ນີໄຟຮາແລ້ວ; ສະນັ້ນ ທ່ານບໍ່ໄດ້ເປັນຫົວໜ້າຜູ້ຕັດສິນດູແລ ພວກເຮົາອີກຕໍ່ໄປ.

๑๓ ບັດນີ້ເມື່ອຜູ້ຄົນເວົ້າແນວນັ້ນແລ້ວ, ແລະ ໄດ້ຕໍ່ຕ້ານຄຳເວົ້າ ທັງໝົດຂອງເພີ່ນ ແລະ ໝິ່ນປະໝາດ ແລະ ຖົ່ມນ້ຳລາຍໃສ່ ເພີ່ນ, ແລະ ຂັບໄລ່ເພີ່ນອອກໄປຈາກເມືອງຂອງພວກເຂົາ, ເພີ່ນ ຈຶ່ງໄດ້ອອກໄປຈາກບ່ອນນັ້ນ ແລະ ອອກເດີນທາງມຸ້ງໜ້າໄປຫາ ອີກເມືອງໜຶ່ງຊຶ່ງມີຊື່ວ່າ ອາໂຣນ.

๑๔ ແລະ ເຫດການໄດ້ບັງເກີດຂຶ້ນຄື ຂະນະທີ່ເພີ່ນກຳລັງໄປຫາ ເມືອງນັ້ນ, ໂດຍທີ່ຖືກຖ່ວງດຶງດ້ວຍຄວາມເສົ້າສະຫລົດໃຈ, ໂດຍ ທີ່ບຸກມາດ້ວຍ ຄວາມທຸກຍາກລຳບາກຫລາຍ ແລະ ດ້ວຍຄວາມ ເຈັບປວດໃນຈິດວິນຍານ, ຍ້ອນຄວາມຊົ່ວຮ້າຍຂອງຜູ້ຄົນຢູ່ໃນ ເມືອງອຳໂມນໄນຮາ, ເຫດການໄດ້ບັງເກີດຂຶ້ນເວລາທີ່ແອວມາ ເຕັມໄປດ້ວຍຄວາມເສົ້າສະຫລົດໃຈຢູ່ນັ້ນ, ຈົ່ງເບິ່ງ, ທູດອົງໜຶ່ງ ຂອງພຣະຜູ້ເປັນເຈົ້າໄດ້ມາປະກົດຕໍ່ເພີ່ນ, ກ່າວວ່າ:

๑๕ ເຈົ້າເປັນສຸກແລ້ວແອວມາ; ສະນັ້ນ, ຈົ່ງເງີຍໜ້າຂຶ້ນ ແລະ ປີຕິຍິນດີເຖີດ, ຍ້ອນວ່າເຈົ້າມີເຫດຜົນອັນຍິ່ງໃຫຍ່ທີ່ສຸດທີ່ຈະ ປີຕິຍິນດີ; ເພາະວ່າເຈົ້າຊື່ສັດໃນການຮັກສາພຣະບັນຍັດຂອງ ພຣະເຈົ້ານັບແຕ່ເວລາທີ່ເຈົ້າໄດ້ຮັບຂ່າວຄັ້ງທຳອິດຂອງເຈົ້າຈາກ ພຣະອົງ. ຈົ່ງເບິ່ງ, ເຮົາຄືຜູ້ທີ່ ນຳມັນມາໃຫ້ເຈົ້າ.

๑๖ ແລະ ຈົ່ງເບິ່ງ, ເຮົາຖືກສົ່ງລົງມາເພື່ອສັ່ງໃຫ້ເຈົ້າກັບຄືນໄປ ຫາເມືອງອຳໂມນໄນຮາ ແລະ ສັ່ງສອນຜູ້ຄົນຂອງເມືອງນັ້ນອີກ; ແທ້ຈິງແລ້ວ, ຈົ່ງສັ່ງສອນພວກເຂົາ. ແທ້ຈິງແລ້ວ, ຈົ່ງເວົ້າກັບ ພວກເຂົາວ່າ ຖ້າຫາກພວກເຂົາບໍ່ກັບໃຈ ແລ້ວອົງພຣະຜູ້ເປັນ ເຈົ້າຈະ ທຳລາຍພວກເຂົາ.

ຈົ່ງເບິ່ງ, ໃນຂະນະນີ້ພວກເຂົາພະຍາຍາມທີ່ຈະທຳລາຍ ເສລີພາບຂອງຜູ້ຄົນຂອງເຈົ້າ, (ເພາະວ່າພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້) ຊຶ່ງກົງກັນຂ້າມກັບຂໍ້ກຳນົດ, ແລະ ການພິພາກສາ, ແລະ ພຣະບັນຍັດ ຊຶ່ງພຣະອົງໄດ້ປະທານໃຫ້ແກ່ຜູ້ຄົນຂອງ ພຣະອົງ.

For behold, they do study at this time that they may destroy the liberty of thy people, (for thus saith the Lord) which is contrary to the statutes, and judgments, and commandments which he has given unto his people.

ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກແອວມາໄດ້ ຮັບຂ່າວຈາກທູດຂອງພຣະຜູ້ເປັນເຈົ້າແລ້ວ, ເພີ່ນຈຶ່ງໄດ້ກັບຄືນ ໄປຫາແຜ່ນດິນອຳໂມນໄນຮາຢ່າງວ່ອງໄວ. ແລະ ເພີ່ນໄດ້ເຂົ້າໄປ ໃນເມືອງອີກທາງໜຶ່ງ, ແທ້ຈິງແລ້ວ, ເຂົ້າໄປທາງໃຕ້ຂອງເມືອງ ອຳໂມນໄນຮາ.

Now it came to pass that after Alma had received his message from the angel of the Lord he returned speedily to the land of Ammonihah. And he entered the city by another way, yea, by the way which is on the south of the city of Ammonihah.

ແລະ ໃນຂະນະທີ່ເພີ່ນກຳລັງເຂົ້າໄປໃນເມືອງນັ້ນດ້ວຍຄວາມ ຫິວໂຫຍ, ເພີ່ນໄດ້ເວົ້າກັບຊາຍຄົນໜຶ່ງວ່າ: ເຈົ້າຫາອັນໃດໃຫ້ ຜູ້ຮັບໃຊ້ທີ່ຖ່ອມຕົວຂອງພຣະເຈົ້າກິນແດ່ໄດ້ບໍ?

And as he entered the city he was an hungered, and he said to a man: Will ye give to an humble servant of God something to eat?

ແລະ ຊາຍຄົນນັ້ນກ່າວກັບເພີ່ນວ່າ: ຂ້ານ້ອຍເປັນຊາວນີໄຟ, ແລະ ຂ້ານ້ອຍຮູ້ຈັກว่าທ່ານເປັນສາດສະດາຜູ້ບໍລິສຸດຂອງ ພຣະເຈົ້າເພາະວ່າທ່ານແມ່ນຜູ້ທີ່ ທູດກ່າວໃນພາບນິມິດว่า: ເຈົ້າຈົ່ງຕ້ອນຮັບ. ສະນັ້ນ, ຈົ່ງເຂົ້າໄປໃນເຮືອນກັບຂ້ານ້ອຍ ແລະ ຂ້ານ້ອຍຈະໃຫ້ອາຫານຂອງຂ້ານ້ອຍແກ່ທ່ານ; ແລະ ຂ້ານ້ອຍ ຮູ້ຈັກແລ້ວວ່າ ທ່ານຈະເປັນພອນໃຫ້ແກ່ຂ້ານ້ອຍ ແລະ ເຮືອນ ຊານຂອງຂ້ານ້ອຍ.

And the man said unto him: I am a Nephite, and I know that thou art a holy prophet of God, for thou art the man whom an angel said in a vision: Thou shalt receive. Therefore, go with me into my house and I will impart unto thee of my food; and I know that thou wilt be a blessing unto me and my house.

ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາຍຄົນນັ້ນໄດ້ຕ້ອນຮັບເພີ່ນ ເຂົ້າໄປໃນເຮືອນຂອງລາວ; ແລະ ຊາຍຄົນນັ້ນຊື່ວ່າ ແອມມິວ ເລັກ; ແລະ ລາວໄດ້ນຳເອົາເຂົ້າ ແລະ ຊີ້ນອອກມາວາງຕໍ່ໜ້າ ແອວມາ.

And it came to pass that the man received him into his house; and the man was called Amulek; and he brought forth bread and meat and set before Alma.

ແລະ ເຫດການໄດ້ບັງເກີດຂຶ້ນຄື ແອວມາໄດ້ກິນເຂົ້າຈົນອີ່ມ; ແລ້ວເພີ່ນໄດ້ ໃຫ້ພອນແກ່ແອມມິວເລັກ ພ້ອມດ້ວຍເຮືອນຊານ ຂອງລາວ, ແລະ ເພີ່ນໄດ້ຖວາຍຄວາມຂອບຄຸນແດ່ພຣະເຈົ້າ.

And it came to pass that Alma ate bread and was filled; and he blessed Amulek and his house, and he gave thanks unto God.

ແລະ ຫລັງຈາກເພີ່ນໄດ້ກິນອີ່ມແລ້ວ ເພີ່ນໄດ້ເວົ້າກັບແອມ ມິວເລັກว่า: ເຮົາຄືແອວມາ ແລະ ເປັນ ມະຫາປະໂລຫິດດູແລ ສາດສະໜາຈັກຂອງພຣະເຈົ້າຕະຫລອດທົ່ວແຜ່ນດິນ.

And after he had eaten and was filled he said unto Amulek: I am Alma, and am the high priest over the church of God throughout the land.

ແລະ ຈົ່ງເບິ່ງ, ເຮົາຖືກເອີ້ນໃຫ້ມາສັ່ງສອນພຣະຄຳຂອງ ພຣະເຈົ້າໃນບັນດາຜູ້ຄົນພວກນີ້ທັງໝົດ, ຕາມວິນຍານແຫ່ງ ການເປີດເຜີຍ ແລະ ການທຳນາຍ; ແລະ ເຮົາຢູ່ໃນແຜ່ນດິນນີ້ ແລ້ວ ແຕ່ຜູ້ຄົນບໍ່ຕ້ອນຮັບເຮົາເລີຍ ແລະ ພວກເຂົາໄດ້ ຂັບໄລ່ເຮົາ ອອກໄປ ແລະ ເຮົາເອງເກືອບຈະຫັນຫລັງໃສ່ແຜ່ນດິນນີ້ ຕະຫລອດໄປ.

And behold, I have been called to preach the word of God among all this people, according to the spirit of revelation and prophecy; and I was in this land and they would not receive me, but they cast me out and I was about to set my back towards this land forever.

ແລະ ຈົ່ງເບິ່ງ, ເຮົາໄດ້ຖືກສັ່ງໃຫ້ກັບຄືນມາອີກ ແລະ ທຳນາຍ ແກ່ຜູ້ຄົນພວກນີ້, ແທ້ຈິງແລ້ວ, ມາໃຫ້ຖ້ອຍຄຳຟ້ອງພວກເຂົາ ກ່ຽວກັບຄວາມຊົ່ວຮ້າຍຂອງພວກເຂົາ.

But behold, I have been commanded that I should turn again and prophesy unto this people, yea, and to testify against them concerning their iniquities.

๘ฉ ແລະ ບັດນີ້, ແອມມິວເລັກ, ຍ້ອນວ່າເຈົ້າໄດ້ລ້ຽງເກີອເຮົາ, ແລະ ໃຫ້ເຮົາເຂົ້າມາພັກເຊົານຳເຈົ້າ; ເຈົ້າຈົ່ງໄດ້ຮັບພອນແລ້ວ, ເຮົາອຶດຫິວຍ້ອນວ່າເຮົາໄດ້ຖືສິນອົດເຂົ້າມາເປັນເວລາຫລາຍມື້ແລ້ວ.

And now, Amulek, because thou hast fed me and taken me in, thou art blessed; for I was an hungered, for I had fasted many days.

๘ສ ແລະ ແອວມາໄດ້ພັກເຊົາຢູ່ນຳແອມມິວເລັກຫລາຍມື້ກ່ອນເພີ່ນເລີ່ມສັ່ງສອນຜູ້ຄົນຕໍ່ໄປ.

And Alma tarried many days with Amulek before he began to preach unto the people.

๘ຊ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນໄດ້ເຮັດຄວາມຊົ່ວຮ້າຍຢ່າງຮຸນແຮງຫລາຍຂຶ້ນ.

And it came to pass that the people did wax more gross in their iniquities.

๘ຌ ແລະ ພຣະຄຳມາເຖິງແອວມາ, ກ່າວว่า: ຈົ່ງໄປ, ແລະ ເວົ້າກັບແອມມິວເລັກຜູ້ຮັບໃຊ້ຂອງເຮົາว่า ຈົ່ງອອກໄປທຳນາຍແກ່ຜູ້ຄົນພວກນີ້, ໂດຍກ່າວว่า—ພວກເຈົ້າຈົ່ງ ກັບໃຈເຖີດ ເພາະວ່າພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້, ຖ້າຫາກພວກເຈົ້າບໍ່ກັບໃຈ ແລ້ວເຮົາຈະມາຢ້ຽມຢາມຜູ້ຄົນພວກນີ້ດ້ວຍຄວາມຄຽດແຄ້ນຂອງເຮົາ; ແທ້ຈິງແລ້ວ, ແລະ ເຮົາຈະບໍ່ເອົາຄວາມຄຽດແຄ້ນຂອງເຮົາກັບຄືນໄປ.

And the word came to Alma, saying: Go; and also say unto my servant Amulek, go forth and prophesy unto this people, saying—Repent ye, for thus saith the Lord, except ye repent I will visit this people in mine anger; yea, and I will not turn my fierce anger away.

ມ໑ ແລະ ແອວມາກັບແອມມິວເລັກໄດ້ອອກໄປໃນບັນດາຜູ້ຄົນ, ເພື່ອປະກາດພຣະຄຳຂອງພຣະເຈົ້າແກ່ພວກເຂົາ; ແລະ ທັງສອງກໍເຕັມໄປດ້ວຍພຣະວິນຍານບໍລິສຸດ.

And Alma went forth, and also Amulek, among the people, to declare the words of God unto them; and they were filled with the Holy Ghost.

ມ໑ ແລະ ພວກເພີ່ນໄດ້ຮັບ ອຳນາດອັນມະຫາສານ, ເຖິງຂະໜາດທີ່ບໍ່ສາມາດຂັງພວກເພີ່ນໄວ້ໃນຄຸກມືດໄດ້; ທັງເປັນໄປບໍ່ໄດ້ທີ່ຜູ້ຄົນຈະຂ້າພວກເພີ່ນ; ເຖິງຢ່າງໃດກໍຕາມ, ພວກເພີ່ນກໍຍັງບໍ່ໄດ້ໃຊ້ ອຳນາດຂອງພວກເພີ່ນເລີຍ ຈົນວ່າພວກເພີ່ນຖືກມັດໄວ້ດ້ວຍເຊືອກ ແລະ ຖືກເອົາເຂົ້າຄຸກ. ບັດນີ້, ມັນເປັນໄປເພື່ອພຣະຜູ້ເປັນເຈົ້າຈະໄດ້ສະແດງອຳນາດຂອງພຣະອົງອອກມາທີ່ມີຢູ່ໃນພວກເພີ່ນ.

And they had power given unto them, insomuch that they could not be confined in dungeons; neither was it possible that any man could slay them; nevertheless they did not exercise their power until they were bound in bands and cast into prison. Now, this was done that the Lord might show forth his power in them.

ມ໑ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເພີ່ນໄດ້ອອກໄປ ແລະ ເລີ່ມສັ່ງສອນ ແລະ ທຳນາຍແກ່ຜູ້ຄົນຕາມວິນຍານ ແລະ ອຳນາດຊຶ່ງພຣະຜູ້ເປັນເຈົ້າໄດ້ປະທານໃຫ້ແກ່ພວກເພີ່ນ.

And it came to pass that they went forth and began to preach and to prophesy unto the people, according to the spirit and power which the Lord had given them.

ຄຳເວົ້າຂອງແອວມາ, ແລະ ຄຳເວົ້າຂອງແອມມິວເລັກນຳອີກ, ຊຶ່ງ ໄດ້ປະກາດແກ່ຜູ້ຄົນທີ່ຢູ່ໃນແຜ່ນດິນອຳໂມນໄນຮາ. ແລະ ພວກ ເພີ່ນຖືກຈັບເຂົ້າຄຸກນຳອີກ, ແລະ ຖືກປົດປ່ອຍໂດຍອຳນາດອັນ ໜ້າອັດສະຈັນໃຈຂອງພຣະເຈົ້າຊຶ່ງຢູ່ກັບພວກເພີ່ນ, ຕາມ ບັນທຶກຂອງແອວມາ.

ແອວມາ ຈ

ຫ ແລະ ອີກເທື່ອໜຶ່ງ, ຂ້າພະເຈົ້າແອວມາໂດຍທີ່ໄດ້ຮັບບັນຊາຈາກ ພຣະເຈົ້າວ່າ ຂ້າພະເຈົ້າຄວນພາແອມມິວເລັກອອກໄປສັ່ງສອນ ຜູ້ຄົນພວກນີ້ອີກ ຫລື ຜູ້ຄົນທີ່ຢູ່ໃນເມືອງອຳໂມນໄນຮາ, ເຫດການໄດ້ບັງເກີດຂຶ້ນ ເມື່ອຂ້າພະເຈົ້າເລີ່ມຕົ້ນສັ່ງສອນພວກ ເຂົາ, ພວກເຂົາກໍຂັດແຍ້ງກັບຂ້າພະເຈົ້າ, ໂດຍກ່າວວ່າ:

ສ ທ່ານແມ່ນໃຜ? ທ່ານຄິດບໍວ່າພວກເຮົາຈະເຊື່ອປະຈັກ ພະຍານຂອງຄົນ ຜູ້ດຽວ, ເຖິງແມ່ນວ່າທ່ານຈະສັ່ງສອນພວກ ເຮົາວ່າ ແຜ່ນດິນໂລກຈະຜ່ານໄປ?

ສນ ບັດນີ້ຄົນພວກນີ້ບໍ່ເຂົ້າໃຈຄຳເວົ້າທີ່ພວກເຂົາເວົ້າໄປນັ້ນເລີຍ; ເພາະວ່າພວກເຂົາບໍ່ຮູ້ວ່າ ແຜ່ນດິນໂລກຈະຜ່ານໄປ.

ສສ ແລະ ພວກເຂົາເວົ້າອີກວ່າ: ພວກເຮົາຈະບໍ່ເຊື່ອຄຳເວົ້າຂອງ ທ່ານເຖິງແມ່ນທ່ານຈະທຳນາຍວ່າ ເມືອງໃຫຍ່ຈະຖືກທຳລາຍ ໄປໃນມື້ ດຽວ.

ສອ ບັດນີ້ພວກເຂົາບໍ່ຮູ້ວ່າ ພຣະເຈົ້າຈະກະທຳສິ່ງອັດສະຈັນເຊັ່ນ ນີ້ໄດ້, ເພາະວ່າພວກເຂົາເປັນຄົນທີ່ມີໃຈແຂງກະດ້າງ ແລະ ແຂງ ຄໍ.

ສສ ແລະ ພວກເຂົາເວົ້າວ່າ: ພຣະເຈົ້າ ແມ່ນໃຜ, ເປັນຫຍັງເພີ່ນ ຈຶ່ງ ບໍ່ສົ່ງສິດອຳນາດຂອງເພີ່ນມາໃນບັນດາຜູ້ຄົນ ພວກນີ້, ຊຶ່ງ ມີຫລາຍກວ່າຄົນຜູ້ດຽວເພື່ອປະກາດຄວາມຈິງຂອງສິ່ງທີ່ຍິ່ງ ໃຫຍ່ ແລະ ໜ້າອັດສະຈັນເຊັ່ນນີ້ແກ່ພວກເຂົາ?

ສສ ແລະ ພວກເຂົາຢືນຂຶ້ນເພື່ອຫວັງທີ່ຈະຈັບຂ້າພະເຈົ້າ; ແຕ່ຈົ່ງ ເບິ່ງ, ພວກເຂົາຈັບບໍ່ໄດ້. ແລະ ຂ້າພະເຈົ້າໄດ້ຢືນຂຶ້ນຢ່າງ ອາດຫານເພື່ອປະກາດແກ່ພວກເຂົາ, ແທ້ຈິງແລ້ວ, ຂ້າພະເຈົ້າ ໄດ້ໃຫ້ຖ້ອຍຄຳຢ່າງກ້າຫານແກ່ພວກເຂົາ, ໂດຍກ່າວວ່າ:

ສເ ຈົ່ງເບິ່ງ, ໂອ້ ພວກເຈົ້າ ລຸ້ນທີ່ຊົ່ວ ແລະ ເສຍຄົນເອີຍ, ພວກ ເຈົ້າລືມປະເພນີຂອງບັນພະບຸລຸດຂອງພວກເຈົ້າໄດ້ແນວໃດ; ແທ້ຈິງແລ້ວ, ເປັນຫຍັງພວກເຈົ້າຈຶ່ງລືມພຣະບັນຍັດຂອງ ພຣະເຈົ້າ.

ສຈ ພວກເຈົ້າຈື່ບໍ່ໄດ້ບໍວ່າ ລີໄຮບັນພະບຸລຸດຂອງພວກເຮົາໄດ້ຖືກ ນຳພາອອກຈາກເຢຣູຊາເລັມໂດຍ ພຣະຫັດ ຂອງພຣະເຈົ້າ? ພວກເຈົ້າຈື່ບໍ່ໄດ້ບໍວ່າ ຄົນພວກນັ້ນຖືກນຳເອົາຜ່ານຖິ່ນ ແຫ້ງແລ້ງກັນດານມາທັງໝົດໂດຍພຣະອົງ?

The words of Alma, and also the words of Amulek, which were declared unto the people who were in the land of Ammonihah. And also they are cast into prison, and delivered by the miraculous power of God which was in them, according to the record of Alma.

Alma 9

And again, I, Alma, having been commanded of God that I should take Amulek and go forth and preach again unto this people, or the people who were in the city of Ammonihah, it came to pass as I began to preach unto them, they began to contend with me, saying:

Who art thou? Suppose ye that we shall believe the testimony of one man, although he should preach unto us that the earth should pass away?

Now they understood not the words which they spake; for they knew not that the earth should pass away.

And they said also: We will not believe thy words if thou shouldst prophesy that this great city should be destroyed in one day.

Now they knew not that God could do such marvelous works, for they were a hard-hearted and a stiffnecked people.

And they said: Who is God, that sendeth no more authority than one man among this people, to declare unto them the truth of such great and marvelous things?

And they stood forth to lay their hands on me; but behold, they did not. And I stood with boldness to declare unto them, yea, I did boldly testify unto them, saying:

Behold, O ye wicked and perverse generation, how have ye forgotten the tradition of your fathers; yea, how soon ye have forgotten the commandments of God.

Do ye not remember that our father, Lehi, was brought out of Jerusalem by the hand of God? Do ye not remember that they were all led by him through the wilderness?

ຫ ພວກເຈົ້າຫລົງລືມກັນຢ່າງວ່ອງໄວໄດ້ແນວໃດວ່າ ຕັ້ງຫລາຍ
ເທື່ອທີ່ພຣະອົງໄດ້ປົດປ່ອຍບັນພະບຸລຸດຂອງພວກເຮົາໃຫ້ພົ້ນ
ຈາກກຳມືຂອງສັດຕູຂອງພວກເຂົາ ແລະ ປົກປັກຮັກສາພວກ
ເຂົາໃຫ້ພົ້ນຈາກການຖືກທຳລາຍຈາກກຳມືຂອງພີ່ນ້ອງຂອງ
ພວກເຂົາ?

And have ye forgotten so soon how many times he delivered our fathers out of the hands of their enemies, and preserved them from being destroyed, even by the hands of their own brethren?

ສິບ ແທ້ຈິງແລ້ວ, ແລະ ຖ້າຫາກບໍ່ແມ່ນຍ້ອນອຳນາດ ແລະ
ຄວາມເມດຕາອັນຫາທີ່ປຽບບໍ່ໄດ້ຂອງພຣະອົງ ແລະ ຄວາມອົດ
ກັ້ນຂອງພຣະອົງທີ່ມີຕໍ່ພວກເຮົາແລ້ວ, ພວກເຮົາກໍຈະຖືກຕັດ
ອອກຈາກຜືນແຜ່ນດິນໂລກຢ່າງຫລີກລ້ຽງບໍ່ໄດ້ແຕ່ດົນແລ້ວ
ກ່ອນເຖິງໄລຍະນີ້, ແລະ ອາດຖືກສົ່ງໄປສູ່ສະພາບແຫ່ງຄວາມ
ທຸກທໍລະມານ ແລະ ຈິບຫາຍອັນ ບໍ່ມີບ່ອນຈົບ.

Yea, and if it had not been for his matchless power, and his mercy, and his long-suffering towards us, we should unavoidably have been cut off from the face of the earth long before this period of time, and perhaps been consigned to a state of endless misery and woe.

ສິບຫົກ ຈົ່ງເບິ່ງ, ບັດນີ້ຂ້າພະເຈົ້າກ່າວກັບພວກເຈົ້າວ່າ ພຣະອົງໄດ້
ບັນຊາໃຫ້ພວກເຈົ້າກັບໃຈ; ແລະ ພວກເຈົ້າກໍຈະບໍ່ມີທາງໃດທີ່
ຈະໄດ້ຮັບອານາຈັກຂອງພຣະເຈົ້າມາເປັນມູນມໍລະດົກເລີຍ ຖ້າ
ຫາກພວກເຈົ້າບໍ່ກັບໃຈ. ແຕ່ຈົ່ງເບິ່ງ, ນີ້ຍັງບໍ່ໝົດ—ພຣະອົງໄດ້
ບັນຊາໃຫ້ພວກເຈົ້າກັບໃຈ, ຖ້າບໍ່ດັ່ງນັ້ນ ພຣະອົງຈະ ທຳລາຍ
ພວກເຈົ້າໃຫ້ໝົດໄປຈາກຜືນແຜ່ນດິນໂລກ; ແທ້ຈິງແລ້ວ,
ພຣະອົງຈະສະເດັດມາຢ້ຽມຢາມພວກເຈົ້າດ້ວຍຄວາມຄຽດ
ແຄ້ນຂອງພຣະອົງ, ແລະ ໃນຄວາມຄຽດແຄ້ນ ທີ່ສຸດນັ້ນ
ພຣະອົງຈະບໍ່ຫັນໜີເລີຍ.

Behold, now I say unto you that he commandeth you to repent; and except ye repent, ye can in nowise inherit the kingdom of God. But behold, this is not all—he has commanded you to repent, or he will utterly destroy you from off the face of the earth; yea, he will visit you in his anger, and in his fierce anger he will not turn away.

ສິບເຈັດ ຈົ່ງເບິ່ງ, ພວກເຈົ້າຈື່ຈຳພຣະຄຳທີ່ພຣະອົງຮັບສັ່ງກັບລີໄຮໄດ້
ບໍ່ວ່າ: ຕາບໃດທີ່ເຈົ້າຈະຮັກສາບັນຍັດຂອງເຮົາ, ເຈົ້າຈະຮຸ່ງເຮືອງ
ຢູ່ໃນແຜ່ນດິນ? ແລະ ໄດ້ກ່າວໄວ້ອີກว่า: ແລະ ຕາບໃດທີ່ເຈົ້າຈະ
ບໍ່ຮັກສາບັນຍັດຂອງເຮົາ ເຈົ້າຈະຖືກຕັດອອກຈາກທີ່ປະທັບ
ຂອງພຣະຜູ້ເປັນເຈົ້າ.

Behold, do ye not remember the words which he spake unto Lehi, saying that: Inasmuch as ye shall keep my commandments, ye shall prosper in the land? And again it is said that: Inasmuch as ye will not keep my commandments ye shall be cut off from the presence of the Lord.

ສິບແປດ ບັດນີ້ຂ້າພະເຈົ້າຢາກໃຫ້ພວກເຈົ້າຈື່ໄວ້ວ່າ ຕາບໃດທີ່ຊາວເລ
ມັນບໍ່ໄດ້ຮັກສາພຣະບັນຍັດຂອງພຣະເຈົ້າ, ພວກເຂົາຈຶ່ງໄດ້ຖືກ
ຕັດອອກຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ. ບັດນີ້ ພວກເຮົາ
ຈຶ່ງເຫັນว่า ພຣະຄຳຂອງພຣະຜູ້ເປັນເຈົ້າເປັນຄວາມຈິງແລ້ວໃນ
ເລື່ອງນີ້, ແລະ ຊາວເລມັນໄດ້ຖືກຕັດອອກຈາກທີ່ປະທັບຂອງ
ພຣະອົງ, ນັບຕັ້ງແຕ່ຕົ້ນຂອງການລ່ວງລະເມີດຄັ້ງທຳອິດຂອງ
ພວກເຂົາໃນແຜ່ນດິນນີ້.

Now I would that ye should remember, that inasmuch as the Lamanites have not kept the commandments of God, they have been cut off from the presence of the Lord. Now we see that the word of the Lord has been verified in this thing, and the Lamanites have been cut off from his presence, from the beginning of their transgressions in the land.

ສິບເກົ້າ ເຖິງຢ່າງໃດກໍຕາມ ຂ້າພະເຈົ້າຂໍເວົ້າກັບພວກເຈົ້າວ່າ, ໃນວັນ
ແຫ່ງການພິພາກສາ ພຣະອົງຈະ ທົນກັບພວກເຂົາໄດ້ຫລາຍ
ກວ່າທົນກັບພວກເຈົ້າ ຖ້າຫາກว่าพวกเจ้ายังถึงยู่ในบาบ
ຂອງພວກເຈົ້າ, ແທ້ຈິງແລ້ວ, ແມ່ນໃນຊີວິດນີ້ ພຣະອົງຈະທົນ
ກັບພວກເຂົາໄດ້ຫລາຍກວ່າທົນກັບພວກເຈົ້າ ຖ້າຫາກພວກ
ເຈົ້າບໍ່ກັບໃຈ.

Nevertheless I say unto you, that it shall be more tolerable for them in the day of judgment than for you, if ye remain in your sins, yea, and even more tolerable for them in this life than for you, except ye repent.

ເພາະມີສັນຍາຢູ່ຫລາຍຂໍ້ທີ່ ໃຫ້ໄວ້ກັບຊາວເລມັນ; ເປັນຍ້ອນ ຮີດຄອງປະເພນີຂອງບັນພະບຸລຸດຂອງພວກເຂົາທີ່ເຮັດໃຫ້ ພວກເຂົາຢູ່ໃນສະພາບຂອງ ຄວາມໂງ່ຈ້າ; ສະນັ້ນ ພຣະຜູ້ເປັນ ເຈົ້າຈະເມດຕາພວກເຂົາ ແລະ ຕໍ່ການເປັນຢູ່ຂອງພວກເຂົາໃຫ້ ຍາວນານອອກໄປໃນແຜ່ນດິນ.

ແລະ ໃນໄລຍະເວລາໜຶ່ງ ພວກເຂົາຈະຖືກ ນຳມາໃຫ້ເຊື່ອຖື ໃນພຣະຄຳຂອງພຣະອົງໃຫ້ຮູ້ເຖິງຄວາມບໍ່ຖືກຕ້ອງຂອງຮີດ ຄອງປະເພນີຂອງບັນພະບຸລຸດຂອງພວກເຂົາ; ແລະ ຄົນເປັນ ຈຳນວນຫລວງຫລາຍຂອງພວກເຂົາຈະລອດ, ເພາະພຣະຜູ້ ເປັນເຈົ້າຈະເມດຕາທຸກຄົນທີ່ ເອີ້ນຫາພຣະນາມຂອງພຣະອົງ.

ແຕ່ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກເຈົ້າວ່າ ຖ້າຫາກພວກ ເຈົ້າຂຶ້ນຢູ່ກັບຄວາມຊົ່ວຮ້າຍ ວັນເວລາຂອງພວກເຈົ້າກໍຈະບໍ່ຍືນ ນານໃນແຜ່ນດິນນີ້, ເພາະ ຊາວເລມັນຈະຖືກສົ່ງມາຫາພວກ ເຈົ້າ; ແລະ ຖ້າຫາກພວກເຈົ້າບໍ່ກັບໃຈ ພວກເຂົາຈະມາໃນເວລາ ທີ່ພວກເຈົ້າບໍ່ຮູ້ ແລະ ຈະມາຢ້ຽມຢາມພວກເຈົ້າດ້ວຍຄວາມ ພິນາດ ສິ້ນ ແລະ ມັນຈະເປັນໄປຕາມ ພຣະພິໂລດອັນຮຸນແຮງ ຂອງພຣະຜູ້ເປັນເຈົ້າ.

ເພາະພຣະອົງຈະບໍ່ຍອມໃຫ້ພວກເຈົ້າມີຊີວິດຢູ່ໃນຄວາມ ຊົ່ວຮ້າຍຂອງພວກເຈົ້າ, ເພື່ອທຳລາຍຜູ້ຄົນຂອງພຣະອົງ. ຂ້າພະເຈົ້າກ່າວກັບພວກເຈົ້າວ່າ, ບໍ່ເລີຍ; ພຣະອົງຈະຍອມໃຫ້ ຊາວເລມັນ ທຳລາຍຜູ້ຄົນຂອງພຣະອົງທັງໝົດທີ່ມີຊື່ວ່າຊາວນີ ໄຟເສຍດີກວ່າ, ຖ້າຫາກເປັນໄປໄດ້ວ່າພວກເຂົາຈະ ຕົກຢູ່ໃນ ບາບ ແລະ ໃນການລ່ວງລະເມີດ, ເຖິງແມ່ນພວກເຂົາໄດ້ຮັບ ຄວາມສະຫວ່າງ ແລະ ຄວາມຮູ້ຫລາຍຢ່າງຈາກພຣະຜູ້ເປັນເຈົ້າ ອົງເປັນພຣະເຈົ້າຂອງພວກເຂົາແລ້ວ;

ແທ້ຈິງແລ້ວ, ຫລັງຈາກທີ່ເປັນຜູ້ຄົນທີ່ໂປດປານທີ່ສຸດຂອງ ພຣະຜູ້ເປັນເຈົ້າ; ແທ້ຈິງແລ້ວ, ຫລັງຈາກທີ່ເປັນຜູ້ຄົນທີ່ໂປດ ປານທີ່ສຸດກວ່າທຸກປະຊາຊາດ, ທຸກຕະກຸນ, ທຸກພາສາ, ຫລື ທຸກຜູ້ຄົນທັງປວງ; ຫລັງຈາກທີ່ທຸກສິ່ງທຸກຢ່າງໄດ້ໃຫ້ເປັນ ທີ່ ປະກົດແຈ້ງແກ່ພວກເຂົາແລ້ວຕາມຄວາມປາດຖະໜາ ແລະ ສັດທາຂອງພວກເຂົາ ແລະ ຄຳອະທິຖານກ່ຽວກັບເລື່ອງທີ່ເປັນ ມາ ແລະ ທີ່ເປັນຢູ່ ແລະ ທີ່ຈະມາເຖິງ.

ໂດຍທີ່ໄດ້ຮັບການຢ້ຽມຢາມໂດຍພຣະວິນຍານຂອງ ພຣະເຈົ້າ; ໂດຍທີ່ໄດ້ສົນທະນາກັບເທລົ່າທູດ, ແລະ ໂດຍທີ່ສຸລະ ສຽງຂອງພຣະຜູ້ເປັນເຈົ້າໄດ້ຮັບສັ່ງນຳອີກ; ແລະ ໂດຍທີ່ມີ ວິນຍານແຫ່ງການທຳນາຍ ແລະ ວິນຍານແຫ່ງການເປີດເຜີຍ, ແລະ ມີຂອງປະທານຫລາຍຢ່າງນຳອີກ, ຂອງປະທານແຫ່ງ ການເວົ້າພາສາ, ແລະ ຂອງປະທານແຫ່ງການສັ່ງສອນ, ແລະ ຂອງປະທານແຫ່ງພຣະວິນຍານບໍລິສຸດ, ແລະ ຂອງປະທານ ແຫ່ງ ການແປ;

For there are many promises which are extended to the Lamanites; for it is because of the traditions of their fathers that caused them to remain in their state of ignorance; therefore the Lord will be merciful unto them and prolong their existence in the land.

And at some period of time they will be brought to believe in his word, and to know of the incorrectness of the traditions of their fathers; and many of them will be saved, for the Lord will be merciful unto all who call on his name.

But behold, I say unto you that if ye persist in your wickedness that your days shall not be prolonged in the land, for the Lamanites shall be sent upon you; and if ye repent not they shall come in a time when you know not, and ye shall be visited with utter destruction; and it shall be according to the fierce anger of the Lord.

For he will not suffer you that ye shall live in your iniquities, to destroy his people. I say unto you, Nay; he would rather suffer that the Lamanites might destroy all his people who are called the people of Nephi, if it were possible that they could fall into sins and transgressions, after having had so much light and so much knowledge given unto them of the Lord their God;

But the king stood forth among them and administered unto them. And they were pacified towards Aaron and those who were with him.

And it came to pass that when the king saw that the people were pacified, he caused that Aaron and his brethren should stand forth in the midst of the multitude, and that they should preach the word unto them.

๘๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ກະສັດໄດ້ສົ່ງສານ ປະກາດ ໄປທົ່ວແຜ່ນດິນ, ໄປຫາບັນດາຜູ້ຄົນທັງໝົດຂອງເພິ່ນ, ຊຶ່ງຢູ່ ທົ່ວແຜ່ນດິນຂອງເພິ່ນ ຊຶ່ງຢູ່ຕາມທຸກພາກພື້ນໂດຍອ້ອມຮອບ, ຊຶ່ງຢູ່ໃນຊາຍແດນ ຈົນເຖິງທະເລທາງຕາເວັນອອກ, ແລະ ທາງ ຕາເວັນຕົກ, ແລະ ຊຶ່ງຖືກແບ່ງແຍກອອກຈາກ ເຊຣາເຮັມລາ ໂດຍເສັ້ນແຄບໆຂອງຖິ່ນແຫ້ງແລ້ງກັນດານ, ຊຶ່ງເລີ່ມຈາກ ທະເລທາງຕາເວັນອອກ ຈົນເຖິງທະເລທາງຕາເວັນຕົກ, ແລະ ອ້ອມຮອບຊາຍຝັ່ງທະເລ, ແລະ ຊາຍແດນຂອງຖິ່ນແຫ້ງແລ້ງ ກັນດານ ຊຶ່ງຢູ່ທາງເໜືອໃກ້ແຜ່ນດິນເຊຣາເຮັມລາ, ຜ່ານຊາຍ ແດນແມນທາຍ, ໃກ້ໆກັບຫົວແມ່ນ້ຳຊີโดน, ຊຶ່ງໄຫລຈາກທາງ ຕາເວັນອອກໄປຫາທາງຕາເວັນຕົກ—ແລະ ນີ້ຄືການແບ່ງແຍກ ຂອງຊາວເລມັນກັບຊາວນີໄຟ.

๘๘ ບັດນີ້, ຊາວເລມັນຜູ້ທີ່ ຂີ້ຄ້ານມັກງ່ວຍອາໄສຢູ່ໃນຖິ່ນ ແຫ້ງແລ້ງກັນດານ, ແລະ ຢູ່ໃນຜ້າເຕັນ; ແລະ ແຜ່ຂະຫຍາຍ ອອກໄປທົ່ວຖິ່ນແຫ້ງແລ້ງກັນດານທາງຕາເວັນຕົກ, ໃນແຜ່ນ ດິນນີໄຟ; ແທ້ຈິງແລ້ວ, ແລະ ທາງຕາເວັນຕົກຂອງແຜ່ນດິນ ເຊຣາເຮັມລານຳອີກ, ໃນຊາຍແດນໃກ້ຝັ່ງທະເລ, ແລະ ທາງ ຕາເວັນຕົກໃນແຜ່ນດິນນີໄຟ, ຊຶ່ງເປັນມູນມໍລະດົກຂອງ ບັນພະບຸລຸດຂອງພວກເຂົາ, ແລະ ຢູ່ໃນຊາຍແດນໃກ້ຝັ່ງທະເລ ດັ່ງນັ້ນ.

๘๙ ແລະ ມີຊາວເລມັນເປັນຈຳນວນຫລວງຫລາຍອາໄສຢູ່ທາງ ຕາເວັນອອກໃກ້ຝັ່ງທະເລດັ່ງນັ້ນ, ຊຶ່ງບ່ອນນັ້ນຊາວນີໄຟໄດ້ ຂັບໄລ່ພວກເຂົາໜີໄປ. ແລະ ຊາວນີໄຟເກືອບຈະຕົກໄປຢູ່ໃນ ວົງລ້ອມຂອງຊາວເລມັນ; ເຖິງຢ່າງໃດກໍຕາມ ຊາວນີໄຟຍັງເຂົ້າ ເປັນເຈົ້າຂອງແຜ່ນດິນທາງເໜືອທັງໝົດທີ່ຢູ່ໃກ້ຊາຍແດນຂອງ ຖິ່ນແຫ້ງແລ້ງກັນດານທີ່ຫົວແມ່ນ້ຳຊີโดน, ຈາກທາງຕາເວັນ ອອກໄປຫາທາງຕາເວັນຕົກ, ໂດຍອ້ອມຮອບທາງດ້ານຖິ່ນ ແຫ້ງແລ້ງກັນດານທາງເໜືອ, ຈົນກະທັ່ງພວກເຂົາມາເຖິງ ແຜ່ນດິນ ຊຶ່ງພວກເຂົາເອີ້ນວ່າແຜ່ນດິນ ອຸດົມສົມບູນ.

๓๐ ແລະ ມັນມີຊາຍແດນຕິດກັບແຜ່ນດິນ ຊຶ່ງພວກເຂົາເອີ້ນວ່າ ແຜ່ນດິນຮ້າງ, ຊຶ່ງມັນຢູ່ໄກໄປທາງເໜືອຈົນໄປເຖິງແຜ່ນດິນຊຶ່ງ ເຄີຍມີຜູ້ຄົນອາໄສຢູ່ ແລະ ໄດ້ຖືກທຳລາຍໄປແລ້ວ, ຊຶ່ງພວກເຮົາ ໄດ້ເວົ້າເຖິງ ກະດູກຂອງຄົນພວກນັ້ນມາແລ້ວ, ຊຶ່ງເປັນບ່ອນທີ່ ຜູ້ຄົນຂອງເຊຣາເຮັມລາຄົ້ນພົບ ແລະ ເປັນບ່ອນ ທຳອິດທີ່ພວກ ເຂົາມາຮອດ.

๓๑ ແລະ ພວກເຂົາໄດ້ຈາກບ່ອນນັ້ນເຂົ້າໄປໃນຖິ່ນແຫ້ງແລ້ງ ກັນດານທາງໃຕ້. ດັ່ງນັ້ນ ແຜ່ນດິນທາງເໜືອຈຶ່ງຖືກເອີ້ນວ່າ ແຜ່ນດິນຮ້າງ, ແລະ ເອີ້ນແຜ່ນດິນທາງໃຕ້ວ່າອຸດົມສົມບູນ, ເພາະເປັນຖິ່ນແຫ້ງແລ້ງກັນດານທີ່ເຕັມໄປດ້ວຍສັດປ່າທຸກ ຊະນິດ, ຊຶ່ງສັດສ່ວນໜຶ່ງໄດ້ມາຈາກແຜ່ນດິນທາງເໜືອ ເພື່ອ ມາຊອກຫາອາຫານການກິນ.

And it came to pass that the king sent a proclamation throughout all the land, amongst all his people who were in all his land, who were in all the regions round about, which was bordering even to the sea, on the east and on the west, and which was divided from the land of Zarahemla by a narrow strip of wilderness, which ran from the sea east even to the sea west, and round about on the borders of the seashore, and the borders of the wilderness which was on the north by the land of Zarahemla, through the borders of Manti, by the head of the river Sidon, running from the east towards the west—and thus were the Lamanites and the Nephites divided.

Now, the more idle part of the Lamanites lived in the wilderness, and dwelt in tents; and they were spread through the wilderness on the west, in the land of Nephi; yea, and also on the west of the land of Zarahemla, in the borders by the seashore, and on the west in the land of Nephi, in the place of their fathers' first inheritance, and thus bordering along by the seashore.

And also there were many Lamanites on the east by the seashore, whither the Nephites had driven them. And thus the Nephites were nearly surrounded by the Lamanites; nevertheless the Nephites had taken possession of all the northern parts of the land bordering on the wilderness, at the head of the river Sidon, from the east to the west, round about on the wilderness side; on the north, even until they came to the land which they called Bountiful.

And it bordered upon the land which they called Desolation, it being so far northward that it came into the land which had been peopled and been destroyed, of whose bones we have spoken, which was discovered by the people of Zarahemla, it being the place of their first landing.

And they came from there up into the south wilderness. Thus the land on the northward was called Desolation, and the land on the southward was called Bountiful, it being the wilderness which is filled with all manner of wild animals of every kind, a part of which had come from the land northward for food.

ນ໕ ແ

ນ໕ ແ

ນ໕ ສ

ນ໕ ແ

And now, it was only the distance of a day and a half's journey for a Nephite, on the line Bountiful and the land Desolation, from the east to the west sea; and thus the land of Nephi and the land of Zarahemla were nearly surrounded by water, there being a small neck of land between the land northward and the land southward.

And it came to pass that the Nephites had inhabited the land Bountiful, even from the east unto the west sea, and thus the Nephites in their wisdom, with their guards and their armies, had hemmed in the Lamanites on the south, that thereby they should have no more possession on the north, that they might not overrun the land northward.

Therefore the Lamanites could have no more possessions only in the land of Nephi, and the wilderness round about. Now this was wisdom in the Nephites—as the Lamanites were an enemy to them, they would not suffer their afflictions on every hand, and also that they might have a country whither they might flee, according to their desires.

And now I, after having said this, return again to the account of Ammon and Aaron, Omner and Himni, and their brethren.

ແອວມາ ๔ມ

๑ ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ກະສັດຂອງຊາວເລມັນ ໄດ້ສົ່ງ ຂ່າວໄປຫາບັນດາຜູ້ຄົນທັງໝົດຂອງເພີ່ນວ່າ ບໍ່ໃຫ້ຈັບ ອໍາໂມນ, ຫລື ອາໂຣນ, ຫລື ອອມເນີ, ຫລື ຮິມໄນ, ຫລື ອ້າຍ ນ້ອງຂອງພວກເຂົາ ຜູ້ທີ່ຈະອອກໄປສັ່ງສອນພຣະຄໍາຂອງ ພຣະເຈົ້າ, ບໍ່ວ່າຈະຢູ່ບ່ອນໃດກໍຕາມ, ຫລື ບໍ່ວ່າຈະຢູ່ໃນແຜ່ນດິນ ສ່ວນໃດຂອງພວກເຂົາ.

๒ ແທ້ຈິງແລ້ວ, ເພີ່ນໄດ້ອອກຄໍາສັ່ງໄປຍັງບັນດາຜູ້ຄົນວ່າ ບໍ່ໃຫ້ ຈັບກຸມເຂົາເຈົ້າ, ບໍ່ໃຫ້ມັດເຂົາເຈົ້າ ຫລື ເອົາເຂົາເຈົ້າເຂົ້າຄຸກ; ທັງ ບໍ່ໃຫ້ຖົ່ມນໍ້າລາຍໃສ່ເຂົາເຈົ້າ, ບໍ່ໃຫ້ຫຸບຕີເຂົາເຈົ້າ, ບໍ່ໃຫ້ຂັບໄລ່ ເຂົາເຈົ້າອອກຈາກທໍາມະສາລາຂອງພວກເຂົາ, ບໍ່ໃຫ້ຂ້ຽນຕີ ເຂົາເຈົ້າ; ທັງບໍ່ໃຫ້ແກວ່ງກ້ອນຫີນໃສ່ເຂົາເຈົ້າ, ແຕ່ເຂົາເຈົ້າມີສິດ ທີ່ຈະເຂົ້າໄປໃນບ້ານເຮືອນຂອງພວກເຂົາ, ແລະ ໃນພຣະວິຫານ ຂອງພວກເຂົາ, ແລະ ໃນບ່ອນລີ້ໄພຂອງພວກເຂົານໍາອີກ.

๓ ແລະ ພວກເຂົາຈະໄດ້ອອກໄປສັ່ງສອນພຣະຄໍາຕາມຄວາມ ປາດຖະໜາຂອງຕົນສະນັ້ນ, ເພາະວ່າກະສັດໄດ້ປ່ຽນໃຈ ເຫລື້ອມໃສໃນພຣະຜູ້ເປັນເຈົ້າແລ້ວ, ພ້ອມທັງທຸກຄົນໃນລາຊາ ວັງຂອງເພີ່ນ; ດັ່ງນັ້ນ ເພີ່ນຈຶ່ງໄດ້ສົ່ງຂ່າວສານຂອງເພີ່ນໄປທົ່ວ ແຜ່ນດິນເຖິງຜູ້ຄົນຂອງເພີ່ນ, ເພື່ອພຣະຄໍາຂອງພຣະເຈົ້າຈະບໍ່ ໄດ້ມີອັນກີດຂວາງ, ແຕ່ຈະໄດ້ອອກໄປຕະຫລອດທົ່ວແຜ່ນດິນ, ເພື່ອປະຊາຊົນຂອງເພີ່ນຈະໄດ້ຍອມຮັບເຖິງ ຮີດຄອງປະເພນີ ອັນຊົ່ວຮ້າຍຂອງບັນພະບຸລຸດຂອງພວກເຂົາ, ແລະ ເພື່ອພວກ ເຂົາຈະໄດ້ຍອມຮັບວ່າພວກເຂົາເປັນອ້າຍນ້ອງກັນທັງໝົດ, ແລະວ່າພວກເຂົາບໍ່ຄວນເຮັດການຄາດຕະກໍາ, ຫລື ປຸ້ນຈີ້, ຫລື ລັກສິ່ງຂອງ, ຫລື ຫລິ້ນຊູ້, ຫລື ບໍ່ສ້າງຄວາມຊົ່ວຮ້າຍຢ່າງໃດ ເລີຍ.

๔ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອກະສັດໄດ້ສົ່ງ ຂ່າວສານອອກປະກາດເຊັ່ນນີ້ແລ້ວ, ອາໂຣນ ແລະ ອ້າຍນ້ອງ ຂອງລາວກໍໄດ້ອອກເດີນທາງຈາກເມືອງໜຶ່ງໄປຫາອີກເມືອງ ໜຶ່ງ, ແລະ ຈາກບ່ອນນະມັດສະການໜຶ່ງໄປຫາອີກບ່ອນໜຶ່ງ, ໂດຍໄດ້ສະຖາປະນາສາດສະໜາຈັກຂຶ້ນ ແລະ ແຕ່ງຕັ້ງ ປະໂລຫິດທົ່ວແຜ່ນດິນໃນບັນດາຊາວເລມັນ, ເພື່ອສັ່ງສອນ ແລະ ສິດສອນພຣະຄໍາຂອງພຣະເຈົ້າໃນບັນດາພວກເຂົາ; ແລະ ເຂົາເຈົ້າເລີ່ມມີຄວາມສໍາເລັດຢ່າງໃຫຍ່ຫລວງດັ່ງນີ້.

๕ ແລະ ຄົນນັບເປັນພັນໆຖືກນໍາມາສູ່ຄວາມຮູ້ເລື່ອງພຣະຜູ້ ເປັນເຈົ້າ, ແທ້ຈິງແລ້ວ, ຄົນນັບເປັນພັນໆຖືກນໍາມາໃຫ້ເຊື່ອຖືໃນ ຮີດຄອງປະເພນີຂອງຊາວນີໄຟ; ແລະ ພວກເຂົາໄດ້ຮັບການສິດ ສອນເຖິງ ບັນທຶກ ແລະ ການທໍານາຍ ຊຶ່ງໄດ້ຮັບມອບຕໍ່ໆກັນມາ ຈົນເຖິງປະຈຸບັນນີ້.

Alma 23

Behold, now it came to pass that the king of the Lamanites sent a proclamation among all his people, that they should not lay their hands on Ammon, or Aaron, or Omner, or Himni, nor either of their brethren who should go forth preaching the word of God, in whatsoever place they should be, in any part of their land.

Yea, he sent a decree among them, that they should not lay their hands on them to bind them, or to cast them into prison; neither should they spit upon them, nor smite them, nor cast them out of their synagogues, nor scourge them; neither should they cast stones at them, but that they should have free access to their houses, and also their temples, and their sanctuaries.

And thus they might go forth and preach the word according to their desires, for the king had been converted unto the Lord, and all his household; therefore he sent his proclamation throughout the land unto his people, that the word of God might have no obstruction, but that it might go forth throughout all the land, that his people might be convinced concerning the wicked traditions of their fathers, and that they might be convinced that they were all brethren, and that they ought not to murder, nor to plunder, nor to steal, nor to commit adultery, nor to commit any manner of wickedness.

And now it came to pass that when the king had sent forth this proclamation, that Aaron and his brethren went forth from city to city, and from one house of worship to another, establishing churches, and consecrating priests and teachers throughout the land among the Lamanites, to preach and to teach the word of God among them; and thus they began to have great success.

And thousands were brought to the knowledge of the Lord, yea, thousands were brought to believe in the traditions of the Nephites; and they were taught the records and prophecies which were handed down even to the present time.

ຜ ແລະ ແນ່ນອນຕາບໃດທີ່ພຣະຜູ້ເປັນເจ້າຊົງພຣະຊົນຢູ່ສັນໃດ, ຫລາຍຕໍ່ຫລາຍຄົນກໍໄດ້ເຊື່ອຖືພຣະອົງສັນນັ້ນ, ຫລືວ່າຫລາຍຕໍ່ຫລາຍຄົນຖືກນຳມາສູ່ຄວາມຮູ້ຂອງຄວາມຈິງ, ໂດຍການສັ່ງສອນຂອງອຳໂມນ ແລະ ພວກອ້າຍນ້ອງຂອງລາວ, ຕາມວິນຍານແຫ່ງການເປີດເຜີຍ ແລະ ການທຳນາຍ, ແລະ ອຳນາດຂອງພຣະເจ້າເຮັດສິ່ງມະຫັດສະຈັນໃຫ້ແກ່ຄົນເຫລົ່ານັ້ນ—ແທ້ຈິງແລ້ວ, ຂ້າພະເจ້າກ່າວກັບພວກທ່ານວ່າ, ຕາບໃດທີ່ພຣະເจ້າຊົງພຣະຊົນຢູ່ສັນໃດ, ຊາວເລມັນທີ່ເຊື່ອຖືໃນຄຳສັ່ງສອນຂອງພວກເຂົາເຫລົ່ານັ້ນ ແລະ ປ່ຽນໃຈເຫລື້ອມໃສໃນພຣະຜູ້ເປັນເจ້າຈະ ບໍ່ເຄີຍຕົກໄປສັນນັ້ນ.

And as sure as the Lord liveth, so sure as many as believed, or as many as were brought to the knowledge of the truth, through the preaching of Ammon and his brethren, according to the spirit of revelation and of prophecy, and the power of God working miracles in them—yea, I say unto you, as the Lord liveth, as many of the Lamanites as believed in their preaching, and were converted unto the Lord, never did fall away.

ກ ເມື່ອພວກເຂົາກາຍມາເປັນຄົນຊອບທຳແລ້ວ; ພວກເຂົາໄດ້ວາງອາວຸດແຫ່ງການກະບົດຂອງພວກເຂົາ, ຄືພວກເຂົາບໍ່ໄດ້ຕໍ່ສູ້ກັບພຣະເจ້າອີກຕໍ່ໄປ, ທັງບໍ່ໄດ້ຕໍ່ສູ້ກັບອ້າຍນ້ອງຂອງພວກເຂົາອີກເລີຍ.

For they became a righteous people; they did lay down the weapons of their rebellion, that they did not fight against God any more, neither against any of their brethren.

ຂ ບັດນີ້ຜູ້ຄົນເຫລົ່ານີ້ຄື ພວກເຂົາຜູ້ທີ່ປ່ຽນໃຈເຫລື້ອມໃສໃນພຣະຜູ້ເປັນເจ้າ.

Now, these are they who were converted unto the Lord:

ຄ ຜູ້ຄົນຂອງຊາວເລມັນຜູ້ທີ່ຢູ່ໃນແຜ່ນດິນອິດຊະມາເອນ;

The people of the Lamanites who were in the land of Ishmael;

ງ ແລະ ຜູ້ຄົນຂອງຊາວເລມັນຜູ້ທີ່ຢູ່ໃນແຜ່ນດິນມິດໂດໄນ;

And also of the people of the Lamanites who were in the land of Middoni;

ຈ ແລະ ຜູ້ຄົນຂອງຊາວເລມັນຜູ້ທີ່ຢູ່ໃນເມືອງນີໄຟ;

And also of the people of the Lamanites who were in the city of Nephi;

ສ ແລະ ຜູ້ຄົນຂອງຊາວເລມັນຜູ້ທີ່ຢູ່ໃນແຜ່ນດິນໄຊລຳ, ແລະ ຜູ້ທີ່ຢູ່ໃນແຜ່ນດິນ ເຊັມລອນ, ແລະ ຢູ່ໃນເມືອງເລມູເອນ, ແລະ ຢູ່ໃນເມືອງຊິມໄນລຳ.

And also of the people of the Lamanites who were in the land of Shilom, and who were in the land of Shemlon, and in the city of Lemuel, and in the city of Shimnilom.

ຊ ແລະ ນີ້ຄືຊື່ເມືອງຕ່າງໆຂອງຊາວເລມັນ ຊຶ່ງໄດ້ ປ່ຽນໃຈເຫລື້ອມໃສໃນພຣະຜູ້ເປັນເจ້າ; ແລະ ຄົນພວກນີ້ຄືພວກທີ່ວາງອາວຸດແຫ່ງການກະບົດຂອງພວກເຂົາ, ແທ້ຈິງແລ້ວ, ອາວຸດແຫ່ງສົງຄາມທັງໝົດຂອງພວກເຂົາ; ແລະ ພວກເຂົາເປັນຊາວເລມັນທັງໝົດ.

And these are the names of the cities of the Lamanites which were converted unto the Lord; and these are they that laid down the weapons of their rebellion, yea, all their weapons of war; and they were all Lamanites.

ດ ແຕ່ຊາວອາມາລະໄຄບໍ່ໄດ້ ປ່ຽນໃຈເຫລື້ອມໃສເລີຍນອກຈາກຄົນດຽວເທົ່ານັ້ນ; ທັງບໍ່ມີ ຊາວອະມິວລອນຄົນໃດເລີຍທີ່ປ່ຽນໃຈເຫລື້ອມໃສ; ແຕ່ພວກເຂົາເຮັດໃຈແຂງກະດ້າງ, ແລະ ໃຈຂອງຊາວເລມັນຜູ້ທີ່ຢູ່ໃນເຂດນັ້ນຂອງແຜ່ນດິນກໍຄືກັນບໍ່ວ່າໃນບ່ອນໃດກໍຕາມທີ່ພວກເຂົາຢູ່, ແທ້ຈິງແລ້ວ, ແລະ ລວມທັງໝູ່ບ້ານທັງໝົດຂອງພວກເຂົາ ແລະ ເມືອງທັງໝົດຂອງພວກເຂົາ.

And the Amalekites were not converted, save only one; neither were any of the Amulonites; but they did harden their hearts, and also the hearts of the Lamanites in that part of the land wheresoever they dwelt, yea, and all their villages and all their cities.

ຕ ສະນັ້ນ, ພວກເຮົາຈຶ່ງໄດ້ຕັ້ງຊື່ເມືອງທັງໝົດຂອງຊາວເລມັນ ຜູ້ທີ່ໄດ້ກັບໃຈມາສູ່ຄວາມຮູ້ເລື່ອງຄວາມຈິງ ແລະ ປ່ຽນໃຈເຫລື້ອມໃສ.

Therefore, we have named all the cities of the Lamanites in which they did repent and come to the knowledge of the truth, and were converted.

ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ກະສັດ ແລະ ຜູ້ທີ່ປ່ຽນ
ໃຈເຫລື້ອມໃສປາດຖະໜາທີ່ຈະມີຊື່ອີກຊື່ໜຶ່ງ, ເພື່ອວ່າພວກ
ເຂົາຈະໄດ້ມີຄວາມແຕກຕ່າງຈາກອ້າຍນ້ອງຂອງພວກເຂົາ;
ສະນັ້ນ ກະສັດຈຶ່ງໄດ້ປຶກສາຫາລືກັບອາໂຣນ ແລະ ປະໂລຫິດ
ຫລາຍຄົນກ່ຽວກັບຊື່ທີ່ຈະຕັ້ງໃຫ້ພວກເຂົານັ້ນ, ເພື່ອພວກເຂົາ
ຈະໄດ້ມີຄວາມແຕກຕ່າງອອກໄປ.

ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຕັ້ງຊື່ວ່າ
ຊາວ ອານໄທ-ນີໄຟ-ລີໄຮ; ແລະ ພວກເຂົາຈຶ່ງໄດ້ຖືກເອີ້ນຕາມຊື່
ນີ້ ແລະ ບໍ່ຖືກເອີ້ນວ່າຊາວເລມັນອີກຕໍ່ໄປ.

ແລະ ພວກເຂົາເລີ່ມເປັນຄົນສ້າງສາພັດທະນາແທ້ໆ; ແທ້ຈິງ
ແລ້ວ, ພວກເຂົາເປັນເພື່ອນມິດກັບຊາວນີໄຟ; ສະນັ້ນ, ພວກ
ເຂົາຈຶ່ງໄດ້ເປີດການສື່ສານກັນ, ແລະ ການສາບແຊ່ງຂອງ
ພຣະເຈົ້າຈຶ່ງບໍ່ໄດ້ຕິດຕາມພວກເຂົາອີກຕໍ່ໄປ.

And now it came to pass that the king and those who were converted were desirous that they might have a name, that thereby they might be distinguished from their brethren; therefore the king consulted with Aaron and many of their priests, concerning the name that they should take upon them, that they might be distinguished.

And it came to pass that they called their names Anti-Nephi-Lehies; and they were called by this name and were no more called Lamanites.

And they began to be a very industrious people; yea, and they were friendly with the Nephites; therefore, they did open a correspondence with them, and the curse of God did no more follow them.

ແອວມາ ๔๔

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຊາວອາມາລະໄຄ ແລະ ຊາວອະມິວລອນ ແລະ ຊາວເລມັນທີ່ຢູ່ໃນແຜ່ນດິນອະມິວລອນ, ແລະ ແຜ່ນດິນເຮລາມ, ແລະ ຜູ້ທີ່ຢູ່ໃນແຜ່ນດິນ ເຢຣູຊາເລັມນຳ ອີກ, ແລະ ໂດຍສະຫລຸບ, ໃນແຜ່ນດິນທັງໝົດໂດຍອ້ອມຮອບ ທີ່ຍັງບໍ່ທັນໄດ້ປ່ຽນໃຈເຫລື້ອມໃສ ແລະ ບໍ່ໄດ້ຮັບຊື່ວ່າ ອານ ໄທ-ນີໄຟ-ລີໄຮ ຖືກຊາວອາມາລະໄຄ ແລະ ຊາວອະມິວລອນ ຍຸຍົງໃຫ້ຄຽດແຄ້ນໃຫ້ພີ່ນ້ອງຂອງຕົນ.

๒ ແລະ ຄວາມກຽດຊັງຂອງພວກເຂົາຕໍ່ຄົນພວກນັ້ນຮຸນແຮງ ຫລາຍຂຶ້ນ, ແມ່ນເຖິງຂະໜາດທີ່ພວກເຂົາເລີ່ມກໍ່ການກະບົດຕໍ່ ກະສັດຂອງພວກເຂົາ, ເຖິງຂະໜາດທີ່ພວກເຂົາບໍ່ຢາກໃຫ້ເພີ່ນ ເປັນກະສັດຂອງພວກເຂົາ; ສະນັ້ນ, ພວກເຂົາຈຶ່ງໄດ້ຈັບອາວຸດ ຂຶ້ນມາຕໍ່ສູ້ກັບຊາວອານໄທ-ນີໄຟ-ລີໄຮ.

๓ ບັດນີ້ກະສັດໄດ້ມອບລາຊາອານາຈັກໃຫ້ແກ່ລູກຊາຍຂອງ ເພີ່ນ, ແລະ ເພີ່ນໄດ້ເອີ້ນລູກຊາຍຄົນນັ້ນຂອງເພີ່ນວ່າ ອານ ໄທ-ນີໄຟ-ລີໄຮ.

๔ ແລະ ກະສັດໄດ້ສິ້ນຊີວິດໄປໃນປີດຽວກັນນັ້ນຕອນຊາວເລມັນ ເລີ່ມຕຽມການສູ້ຮົບກັບຜູ້ຄົນຂອງພຣະເຈົ້າ.

๕ ແລະ ບັດນີ້ເມື່ອອຳໂມນ ແລະ ພີ່ນ້ອງຂອງລາວ ແລະ ຄົນ ທັງໝົດທີ່ຂຶ້ນມາຢູ່ກັບລາວເຫັນການຕຽມພ້ອມຂອງຊາວເລ ມັນ ເພື່ອຈະທຳລາຍພີ່ນ້ອງຂອງພວກເຂົາ, ພວກເຂົາຈຶ່ງໄດ້ ພາກັນອອກມາຫາແຜ່ນດິນມີດີອານ, ແລະ ບ່ອນນັ້ນອຳໂມນ ໄດ້ພົບພໍ້ກັບພີ່ນ້ອງຂອງລາວທັງໝົດ; ແລະ ຈາກບ່ອນນັ້ນ ພວກເຂົາໄດ້ໄປຫາແຜ່ນດິນອິດຊະມາເອນ ເພື່ອຈະໄດ້ມີການ ປະຊຸມ ປຶກສາຫາລືກັບລາໂມໄນ ແລະ ກັບອານໄທ-ນີໄຟ-ລີໄຮ ນ້ອງຊາຍຂອງເພີ່ນວ່າ ຄວນຈະເຮັດແນວໃດເພື່ອຈະປ້ອງກັນ ຕົນເອງຈາກຊາວເລມັນ.

๖ ບັດນີ້ບໍ່ມີຈັກຄົນເລີຍໃນບັນດາຜູ້ຄົນທັງໝົດທີ່ໄດ້ປ່ຽນໃຈ ເຫລື້ອມໃສໃນພຣະຜູ້ເປັນເຈົ້າທີ່ຈະອອກມາຈັບອາວຸດຂຶ້ນຕໍ່ສູ້ ກັບພີ່ນ້ອງຂອງຕົນ; ແທ້ຈິງແລ້ວ, ບໍ່ມີຈັກຄົນເລີຍທີ່ຍອມຕຽມ ພ້ອມເພື່ອກໍ່ສົງຄາມ; ແທ້ຈິງແລ້ວ, ກະສັດຂອງພວກເຂົາກໍໄດ້ ສັ່ງພວກເຂົາວ່າບໍ່ໃຫ້ເຮັດອີກ.

๗ ບັດນີ້, ນີ້ຄືຄຳເວົ້າທີ່ກະສັດກ່າວກັບຜູ້ຄົນກ່ຽວກັບເລື່ອງນີ້: ຂ້າພະເຈົ້າຂອບພຣະໄທພຣະເຈົ້າ ແລະ ຜູ້ຄົນທີ່ແສນດີຂອງ ຂ້າພະເຈົ້າ, ຊຶ່ງພຣະເຈົ້າຊົງຍິ່ງໃຫຍ່ໃນພຣະກະລຸນາທີ່ຄຸນທີ່ໄດ້ ສົ່ງຊາວນີໄຟພີ່ນ້ອງຂອງພວກເຮົາມາຫາພວກເຮົາ ເພື່ອ ສັ່ງສອນພວກເຮົາ ເພື່ອເຮັດໃຫ້ພວກເຮົາສຳນຶກເຖິງ ຮີດຄອງ ປະເພນີຂອງບັນພະບຸລຸດທີ່ຊົ່ວຮ້າຍຂອງພວກເຮົານັ້ນ.

Alma 24

And it came to pass that the Amalekites and the Amulonites and the Lamanites who were in the land of Amulon, and also in the land of Helam, and who were in the land of Jerusalem, and in fine, in all the land round about, who had not been converted and had not taken upon them the name of Anti-Nephi-Lehi, were stirred up by the Amalekites and by the Amulonites to anger against their brethren.

And their hatred became exceedingly sore against them, even insomuch that they began to rebel against their king, insomuch that they would not that he should be their king; therefore, they took up arms against the people of Anti-Nephi-Lehi.

Now the king conferred the kingdom upon his son, and he called his name Anti-Nephi-Lehi.

And the king died in that selfsame year that the Lamanites began to make preparations for war against the people of God.

Now when Ammon and his brethren and all those who had come up with him saw the preparations of the Lamanites to destroy their brethren, they came forth to the land of Midian, and there Ammon met all his brethren; and from thence they came to the land of Ishmael that they might hold a council with Lamoni and also with his brother Anti-Nephi-Lehi, what they should do to defend themselves against the Lamanites.

Now there was not one soul among all the people who had been converted unto the Lord that would take up arms against their brethren; nay, they would not even make any preparations for war; yea, and also their king commanded them that they should not.

Now, these are the words which he said unto the people concerning the matter: I thank my God, my beloved people, that our great God has in goodness sent these our brethren, the Nephites, unto us to preach unto us, and to convince us of the traditions of our wicked fathers.

ᾳ ແລະ ຈົ່ງເບິ່ງ, ຂ້າພະເຈົ້າຂອບພຣະໄທພຣະເຈົ້າຜູ້ຍິ່ງໃຫຍ່ຂອງຂ້າພະເຈົ້າທີ່ພຣະອົງໄດ້ປະທານສ່ວນໜຶ່ງຂອງພຣະວິນຍານຂອງພຣະອົງໃຫ້ແກ່ພວກເຮົາ ເພື່ອເຮັດໃຫ້ໃຈຂອງພວກເຮົາອ່ອນລົງຈົນວ່າພວກເຮົາໄດ້ເປີດການສື່ສານກັບຊາວນີໄຟຜູ້ທີ່ເປັນພີ່ນ້ອງຂອງພວກເຮົາ.

And behold, I thank my great God that he has given us a portion of his Spirit to soften our hearts, that we have opened a correspondence with these brethren, the Nephites.

ᾳ ແລະ ຈົ່ງເບິ່ງ, ຂ້າພະເຈົ້າຂອບພຣະໄທພຣະເຈົ້າຂອງຂ້າພະເຈົ້າທີ່ໄດ້ເປີດການສື່ສານນີ້ ມັນເຮັດໃຫ້ພວກເຮົາສຳນຶກເຖິງ ບາບຂອງພວກເຮົາ, ແລະ ເຖິງການຄາດຕະກຳອັນຫລວງຫລາຍທີ່ພວກເຮົາໄດ້ກະທຳໄປ.

And behold, I also thank my God, that by opening this correspondence we have been convinced of our sins, and of the many murders which we have committed.

ᾳᾳ ແລະ ຂ້າພະເຈົ້າຂອບພຣະໄທພຣະເຈົ້ານຳອີກ, ແທ້ຈິງແລ້ວ, ພຣະເຈົ້າຜູ້ຊົງຍິ່ງໃຫຍ່ຂອງຂ້າພະເຈົ້າທີ່ພຣະອົງໄດ້ອະນຸຍາດໃຫ້ພວກເຮົາເພື່ອພວກເຮົາຈະໄດ້ກັບໃຈຈາກສິ່ງເຫລົ່ານີ້, ແລະ ທີ່ພຣະອົງໄດ້ໃຫ້ ອະໄພແກ່ພວກເຮົາ ໃນບາບ ແລະ ການຄາດຕະກຳອັນຫລວງຫລາຍ ຊຶ່ງພວກເຮົາໄດ້ກະທຳໄປແລ້ວ, ແລະ ເອົາ ຄວາມຮູ້ສຶກຜິດອອກຈາກໃຈຂອງພວກເຮົາໄປ ໂດຍທາງພຣະຄຸນຄວາມດີຂອງພຣະບຸດຂອງພຣະອົງ.

And I also thank my God, yea, my great God, that he hath granted unto us that we might repent of these things, and also that he hath forgiven us of those our many sins and murders which we have committed, and taken away the guilt from our hearts, through the merits of his Son.

ᾳᾳᾳ ແລະ ບັດນີ້ຈົ່ງເບິ່ງ, ອ້າຍນ້ອງຂອງຂ້າພະເຈົ້າ, ເນື່ອງດ້ວຍວ່າພວກເຮົາໄດ້ກະທຳທຸກສິ່ງທີ່ພວກເຮົາສາມາດ (ໃນຖານະທີ່ພວກເຮົາເປັນພວກທີ່ຫລົງທາງໃນບັນດາມະນຸດຊາດ) ທີ່ໄດ້ກັບໃຈຈາກບາບທັງໝົດຂອງພວກເຮົາ, ແລະ ຈາກການຄາດຕະກຳອັນຫລວງຫລາຍທີ່ພວກເຮົາໄດ້ກະທຳໄປ, ແລະ ໃຫ້ພຣະເຈົ້າເອົາມັນ ອອກຈາກໃຈຂອງພວກເຮົາ ຫລື ວ່າສິ່ງທີ່ພວກເຮົາສາມາດເຮັດໄດ້ນັ້ນພຽງແຕ່ກັບໃຈຢ່າງແນ່ນອນຕໍ່ພຣະເຈົ້າ ເພື່ອພຣະອົງຈະເອົາຮອຍເປື້ອນຂອງພວກເຮົາອອກໄປ—

And now behold, my brethren, since it has been all that we could do (as we were the most lost of all mankind) to repent of all our sins and the many murders which we have committed, and to get God to take them away from our hearts, for it was all we could do to repent sufficiently before God that he would take away our stain—

ᾳᾳᾳᾳ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ເນື່ອງຈາກວ່າພຣະເຈົ້າໄດ້ເອົາຮອຍເປື້ອນຂອງພວກເຮົາອອກໄປ, ແລະ ດາບຂອງພວກເຮົາກັບມາສົດໃສ, ແລ້ວພວກເຮົາຢ່າໄດ້ເຮັດໃຫ້ດາບຂອງພວກເຮົາເປີເປື້ອນໄປດ້ວຍເລືອດຂອງພີ່ນ້ອງຂອງພວກເຮົາອີກເລີຍ.

Now, my best beloved brethren, since God hath taken away our stains, and our swords have become bright, then let us stain our swords no more with the blood of our brethren.

ᾳᾳᾳᾳᾳ ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບພວກທ່ານວ່າ, ຢ່າເລີຍ ຂໍໃຫ້ພວກເຮົາເກັບດາບຂອງພວກເຮົາໄວ້ເພື່ອມັນ ຈະບໍ່ເປີເປື້ອນດ້ວຍເລືອດຂອງພີ່ນ້ອງຂອງພວກເຮົາອີກ; ເພາະວ່າຖ້າຫາກພວກເຮົາເຮັດໃຫ້ດາບຂອງພວກເຮົາເປີເປື້ອນອີກ ພວກເຮົາຈະລ້າງມັນໃຫ້ສົດໃສບໍ່ໄດ້ໂດຍທາງໂລຫິດຂອງພຣະບຸດຂອງພຣະເຈົ້າ ຜູ້ທີ່ຍິ່ງໃຫຍ່ຂອງພວກເຮົາ ຊຶ່ງຈະຫລັ່ງໄຫລເພື່ອການຊົດໃຊ້ແທນບາບຂອງພວກເຮົາ.

Behold, I say unto you, Nay, let us retain our swords that they be not stained with the blood of our brethren; for perhaps, if we should stain our swords again they can no more be washed bright through the blood of the Son of our great God, which shall be shed for the atonement of our sins.

ຄ

ᴀ ᴀᴄᴛ ᴏᴜʀ ᴄᴏᴜɴᴛʀʏ

ແລະ ພວກເຂົາເຮັດແບບນີ້ຕາມຄວາມຄິດເຫັນຂອງພວກ
ເຂົາວ່າ ມັນຈະເປັນປະຈັກພະຍານຕໍ່ພຣະເຈົ້າ ແລະ ຕໍ່
ມະນຸດຊາດດ້ວຍກັນວ່າ ພວກເຂົາ ບໍ່ໄດ້ໃຊ້ອາວຸດເພື່ອການນອງ
ເລືອດກັນອີກເລີຍ; ແລະ ພວກເຂົາໄດ້ເຮັດແບບນີ້ໂດຍຖວາຍ
ການຢືນຢັນ ແລະ ຄຳໝັ້ນສັນຍາໄວ້ກັບພຣະເຈົ້າວ່າ ແທນທີ່ຈະ
ນອງເລືອດກັນ ພວກເຂົາຈະຍອມ ເສຍສະລະຊີວິດຂອງພວກ
ເຂົາເອງ; ແລະ ແທນທີ່ຈະເອົາສິ່ງຂອງຈາກພີ່ນ້ອງໄປ ພວກເຂົາ
ຈະເປັນຜູ້ທີ່ເອົາໃຫ້; ແລະ ແທນທີ່ຈະໃຊ້ເວລາຂອງພວກເຂົາໄປ
ໃນຄວາມຂີ້ຄ້ານມັກງ່າຍ ພວກເຂົາຈະເຮັດວຽກຢ່າງດຸໝັ່ນດ້ວຍ
ມືຂອງພວກເຂົາເອງ.

And this they did, it being in their view a testimony to God, and also to men, that they never would use weapons again for the shedding of man's blood; and this they did, vouching and covenanting with God, that rather than shed the blood of their brethren they would give up their own lives; and rather than take away from a brother they would give unto him; and rather than spend their days in idleness they would labor abundantly with their hands.

ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າ, ເມື່ອຊາວເລມັນຖືກນຳມາ
ສູ່ຄວາມເຊື່ອ, ແລະ ມີຄວາມຮູ້ເຖິງເລື່ອງຂອງຄວາມຈິງ, ແລະ
ພວກເຂົາ ໝັ້ນຄົງຖາວອນ ແລະ ຈະຍອມແພ້ຈົນເຖິງຄວາມ
ຕາຍແທນທີ່ຈະກະທຳບາບ; ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າ
ພວກເຂົາໄດ້ຝັງອາວຸດແຫ່ງສັນຕິສຸກຂອງພວກເຂົາໄວ້, ຫລື
ພວກເຂົາໄດ້ຝັງອາວຸດແຫ່ງສົງຄາມເພື່ອສັນຕິສຸກ.

And thus we see that, when these Lamanites were brought to believe and to know the truth, they were firm, and would suffer even unto death rather than commit sin; and thus we see that they buried their weapons of peace, or they buried the weapons of war, for peace.

ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນຜູ້ທີ່ພີ່ນ້ອງຂອງ
ພວກເຂົາໄດ້ຕຽມພ້ອມເພື່ອກໍ່ສົງຄາມ ໄດ້ຍົກທັບຂຶ້ນມາເຖິງ
ແຜ່ນດິນນີໄຟ ດ້ວຍຈຸດປະສົງຈະປະຫານຊີວິດຂອງກະສັດ,
ແລະ ຈະໄດ້ແຕ່ງຕັ້ງຄົນອື່ນຂຶ້ນແທນ, ແລະ ເພື່ອຈະທຳລາຍ
ຜູ້ຄົນຂອງອານໄທ-ນີໄຟ-ລີໄຮ ອອກໄປຈາກແຜ່ນດິນນຳອີກ.

And it came to pass that their brethren, the Lamanites, made preparations for war, and came up to the land of Nephi for the purpose of destroying the king, and to place another in his stead, and also of destroying the people of Anti-Nephi-Lehi out of the land.

ແລະ ບັດນີ້ເມື່ອຜູ້ຄົນເຫັນວ່າ ພວກນັ້ນກຳລັງມາໂຈມຕີ
ພວກຕົນ, ພວກເຂົາຈຶ່ງໄດ້ອອກໄປພົບກັບພວກນັ້ນ ແລະ
ນອນລົງກັບພື້ນດິນຕໍ່ໜ້າພວກນັ້ນ, ແລະ ເລີ່ມເອີ້ນຫາພຣະ
ນາມຂອງພຣະຜູ້ເປັນເຈົ້າ; ພວກເຂົາໄດ້ຢູ່ໃນທ່າທີນີ້ ເວລາຊາວ
ເລມັນເລີ່ມເຂົ້າໂຈມຕີ ແລະ ເລີ່ມຂ້າພວກເຂົາດ້ວຍດາບ.

Now when the people saw that they were coming against them they went out to meet them, and prostrated themselves before them to the earth, and began to call on the name of the Lord; and thus they were in this attitude when the Lamanites began to fall upon them, and began to slay them with the sword.

ແລະ ເຖິງແມ່ນວ່າບໍ່ມີຜູ້ໃດຕໍ່ຕ້ານເລີຍ, ແຕ່ຊາວເລມັນກໍຍັງ
ໄດ້ຂ້າພວກເຂົາ ຊຶ່ງເປັນຈຳນວນໜຶ່ງພັນຫ້າຄົນ, ແລະ ພວກ
ເຮົາຮູ້ວ່າ ພວກເຂົາໄດ້ຮັບພອນ, ເພາະວ່າພວກເຂົາໄດ້ໄປຢູ່ກັບ
ພຣະເຈົ້າຂອງພວກເຂົາແລ້ວ.

And thus without meeting any resistance, they did slay a thousand and five of them; and we know that they are blessed, for they have gone to dwell with their God.

ບັດນີ້ເມື່ອຊາວເລມັນເຫັນວ່າ ພີ່ນ້ອງຂອງຕົນບໍ່ຍອມໜີຈາກ
ດາບ, ທັງບໍ່ຍອມຫັນໜີໄປທາງຂວາ ຫລື ຊ້າຍມື, ມີແຕ່ນອນຢູ່
ແລະ ຕາຍໄປ, ແລະ ພວກເຂົາສັນລະເສີນພຣະເຈົ້າໃນຂະນະທີ່
ກຳລັງຈະຕາຍຢູ່ພາຍໃຕ້ຄົມດາບ—

Now when the Lamanites saw that their brethren would not flee from the sword, neither would they turn aside to the right hand or to the left, but that they would lie down and perish, and praised God even in the very act of perishing under the sword—

ບັດນີ້ເມື່ອຊາວເລມັນເຫັນເຊັ່ນນີ້ ພວກເຂົາຈຶ່ງໄດ້ ຢຸດການຂ້າ
ຂອງພວກເຂົາ; ແລະ ມີຢູ່ເປັນຈຳນວນຫລວງຫລາຍ ຊຶ່ງໃຈ
ຂອງພວກເຂົາ ພອງຂຶ້ນຢູ່ພາຍໃນ ເພາະວ່າພີ່ນ້ອງຂອງພວກ
ເຂົາລົ້ມຕາຍຢູ່ພາຍໃຕ້ດາບຂອງພວກເຂົາ, ສະນັ້ນ ພວກເຂົາ
ຈຶ່ງໄດ້ກັບໃຈຈາກສິ່ງທີ່ພວກເຂົາໄດ້ກະທຳໄປນັ້ນ.

Now when the Lamanites saw this they did forbear from slaying them; and there were many whose hearts had swollen in them for those of their brethren who had fallen under the sword, for they repented of the things which they had done.

๘๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ໂຍນອາວຸດ ແຫ່ງສົງຄາມລົງ, ແລະ ພວກເຂົາບໍ່ຍອມຈັບມັນອີກ ເພາະການ ສັງເວດຢ່າງຮ້າຍແຮງຈາກການຄາດຕະກຳທີ່ຕົນໄດ້ກະທຳໄປ ນັ້ນ ແລະ ພວກເຂົາຈຶ່ງໄດ້ນອນລົງຄືກັນກັບພີ່ນ້ອງຂອງພວກ ເຂົາ, ໂດຍຫວັງໃນຄວາມເມດຕາປານີຂອງຊາວເລມັນ ຊຶ່ງຍົກ ດາບຂຶ້ນເພື່ອຈະຂ້າພວກເຂົາ.

๘๖ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນຂອງພຣະເຈົ້າໄດ້ມາ ທ້ອນໂຮມກັນໃນມື້ນັ້ນເປັນຈຳນວນຫລາຍກວ່າຄົນທີ່ຖືກຂ້າ ຕາຍ; ແລະ ພວກທີ່ຖືກຂ້າຕາຍນັ້ນເປັນຄົນຊອບທຳ, ສະນັ້ນ ພວກເຮົາຈຶ່ງບໍ່ມີເຫດຜົນທີ່ຈະສົງໄສວ່າ ພວກເຂົາຈະ ລອດຫລື ບໍ່.

๘๗ ແລະ ບໍ່ມີຄົນຊົ່ວຈັກຄົນທີ່ຖືກຂ້າຕາຍໃນບັນດາຄົນເຫລົ່າ ນັ້ນ; ແຕ່ມີຈຳນວນຫລາຍພັນຄົນທີ່ຖືກນຳມາສູ່ເລື່ອງຄວາມ ຈິງ; ພວກເຮົາຈຶ່ງເຫັນວ່າພຣະຜູ້ເປັນເຈົ້າກະທຳໃນຫລາຍວິທີ ທາງເພື່ອຄວາມລອດຂອງຜູ້ຄົນຂອງພຣະອົງ.

๘๘ ບັດນີ້ຊາວເລມັນເປັນຈຳນວນຫລວງຫລາຍຜູ້ທີ່ໄດ້ຂ້າ ພີ່ນ້ອງຂອງພວກເຂົານັ້ນຄື ຊາວອາມາລະໄຄ ແລະ ຊາວອະ ມິວລອນ ຊຶ່ງພວກເຂົາເຮັດຕາມ ລະບຽບຂອງ ຊາວນີຮໍ.

๘๙ ບັດນີ້, ໃນບັນດາຜູ້ທີ່ມາຮ່ວມກັບຜູ້ຄົນຂອງພຣະຜູ້ເປັນເຈົ້າ ນັ້ນ, ບໍ່ມີຈັກຄົນເລີຍທີ່ເປັນຊາວອາມາລະໄຄ ຫລື ຊາວອະ ມິວລອນ ຫລື ຜູ້ທີ່ເຮັດຕາມລະບຽບຂອງຊາວນີຮໍ, ມີແຕ່ຜູ້ສືບ ຕະກຸນໂດຍແທ້ຈິງຂອງເລມັນ ແລະ ເລມູເອນ.

๙๐ ແລະ ພວກເຮົາຈຶ່ງຫລິງເຫັນໄດ້ຢ່າງແຈ່ມແຈ້ງວ່າ ຫລັງຈາກ ພວກໃດພວກໜຶ່ງທີ່ເຄີຍໄດ້ຮັບ ຄວາມສະຫວ່າງໂດຍ ພຣະວິນຍານຂອງພຣະເຈົ້າມາແລ້ວ, ແລະ ມີ ຄວາມຮູ້ຢ່າງ ກວ້າງຂວາງເຖິງສິ່ງທີ່ກ່ຽວກັບຄວາມຊອບທຳ ແລະ ຕົກເຂົ້າໄປ ສູ່ບາບ ແລະ ການລ່ວງລະເມີດ, ພວກເຂົາຈຶ່ງກັບມາເປັນຄົນ ແຂງກະດ້າງຫລາຍຂຶ້ນ, ແລະ ສະພາບຂອງພວກເຂົາຈຶ່ງກັບ ມາ ຊົ່ວຮ້າຍກວ່າຜູ້ທີ່ບໍ່ເຄີຍຮູ້ເລື່ອງເຫລົ່ານີ້ມາກ່ອນຊ້ຳອີກ.

And it came to pass that they threw down their weapons of war, and they would not take them again, for they were stung for the murders which they had committed; and they came down even as their brethren, relying upon the mercies of those whose arms were lifted to slay them.

And it came to pass that the people of God were joined that day by more than the number who had been slain; and those who had been slain were righteous people, therefore we have no reason to doubt but what they were saved.

And there was not a wicked man slain among them; but there were more than a thousand brought to the knowledge of the truth; thus we see that the Lord worketh in many ways to the salvation of his people.

Now the greatest number of those of the Lamanites who slew so many of their brethren were Amalekites and Amulonites, the greatest number of whom were after the order of the Nehors.

Now, among those who joined the people of the Lord, there were none who were Amalekites or Amulonites, or who were of the order of Nehor, but they were actual descendants of Laman and Lemuel.

And thus we can plainly discern, that after a people have been once enlightened by the Spirit of God, and have had great knowledge of things pertaining to righteousness, and then have fallen away into sin and transgression, they become more hardened, and thus their state becomes worse than though they had never known these things.

ແອວມາ ๘๕

๑ ແລະ ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນເຫລົ່ານັ້ນ ໄດ້ມີຄວາມຄຽດແຄ້ນທີ່ສຸດ ເພາະວ່າພວກເຂົາໄດ້ຂ້າ ພີ່ນ້ອງຂອງຕົນ; ສະນັ້ນພວກເຂົາຈົ່ງສາບານວ່າຈະແກ້ແຄ້ນ ຊາວນີໄຟ; ແລະ ພວກເຂົາບໍ່ໄດ້ພະຍາຍາມຂ້າຜູ້ຄົນຂອງ ອານ ໄທ-ນີໄຟ-ລີໄຮ ອີກຕໍ່ໄປໃນເວລານັ້ນ.

๒ ແຕ່ພວກເຂົາໄດ້ຍົກກອງທັບຂ້າມໄປໃນຊາຍແດນຂອງແຜ່ນ ດິນເຊຣາເຮັມລາ, ແລະ ເຂົ້າມາໂຈມຕີຜູ້ຄົນ ຊຶ່ງຢູ່ໃນແຜ່ນດິນອໍ ໂມນໄນຮາ ແລະ ທຳລາຍພວກເຂົາ.

๓ ແລະ ຫລັງຈາກນັ້ນ, ພວກເຂົາໄດ້ມີການສູ້ຮົບກັບຊາວນີໄຟ ຫລາຍຄັ້ງ, ຊຶ່ງພວກເຂົາໄດ້ຖືກຂັບໄລ່ອອກໄປ ແລະ ຖືກຂ້າ ຕາຍ.

๔ ແລະ ໃນບັນດາຊາວເລມັນທີ່ຖືກຂ້າຕາຍນັ້ນມີ ລູກຫລານ ຂອງອະມິວລອນ ແລະ ພີ່ນ້ອງຂອງລາວຜູ້ເປັນພວກປະໂລຫິດ ຂອງໂນອາ, ແລະ ພວກເຂົາເຫລົ່ານັ້ນເກືອບທັງໝົດ ຖືກຂ້າ ຕາຍດ້ວຍນ້ຳມືຂອງຊາວນີໄຟ;

๕ ແລະ ພວກທີ່ຍັງເຫລືອຢູ່ນັ້ນໄດ້ໝີເຂົ້າໄປໃນຖິ່ນແຫ້ງແລ້ງ ກັນດານທາງຕາເວັນອອກ ແລະ ໄປຍາດແຍ່ງເອົາອຳນາດ ແລະ ສິດອຳນາດປົກຄອງຊາວເລມັນ, ຈົ່ງເຮັດໃຫ້ຊາວເລມັນຫລາຍ ຄົນຖືກ ຂ້າຕາຍດ້ວຍໄຟ ເພາະຄວາມເຊື່ອຖືຂອງພວກເຂົາ—

๖ ເພາະຫລັງຈາກທີ່ ພວກເຂົາຫລາຍຄົນໄດ້ຮັບການສູນເສຍ ຢ່າງໜັກ ແລະ ມີຄວາມທຸກນັ້ນຫລາຍ, ກໍເລີ່ມສຳນຶກໃນຄວາມ ຊົງຈຳເຖິງ ຄຳເວົ້າຂອງອາໂຣນ ແລະ ພີ່ນ້ອງຂອງລາວ ຊຶ່ງໄດ້ ສັ່ງສອນພວກເຂົາໃນແຜ່ນດິນຂອງພວກເຂົາ; ສະນັ້ນ ພວກ ເຂົາຈົ່ງເລີ່ມບໍ່ເຊື່ອຖືໃນ ຮີດຄອງປະເພນີຂອງບັນພະບຸລຸດຂອງ ພວກເຂົາ ແລະ ມາເຊື່ອຖືໃນພຣະຜູ້ເປັນເຈົ້າ, ແລະ ວ່າພຣະອົງ ໄດ້ປະທານອຳນາດອັນຍິ່ງໃຫຍ່ໃຫ້ແກ່ຊາວນີໄຟ; ແລະ ຫລາຍ ຄົນໃນພວກເຂົາຈົ່ງໄດ້ປ່ຽນໃຈເຫລື້ອມໃສດັ່ງນີ້ໃນຖິ່ນ ແຫ້ງແລ້ງກັນດານ.

๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກທີ່ປົກຄອງທີ່ເຫລືອຢູ່ ຊຶ່ງເປັນລູກຫລານຂອງ ອະມິວລອນ ໄດ້ເຮັດໃຫ້ພວກເຂົາເຫລົ່ານັ້ນ ຕາຍ, ແທ້ຈິງແລ້ວ, ແມ່ນຄົນທັງໝົດທີ່ເຊື່ອຖືໃນເລື່ອງ ເຫລົ່ານີ້.

๘ ບັດນີ້ການຕາຍນີ້ເປັນສາເຫດໃຫ້ພີ່ນ້ອງຂອງພວກເຂົາ ຫລາຍຄົນຖືກຍຸຍົງໃຫ້ຄຽດແຄ້ນ ແລະ ເລີ່ມມີການຜິດຖຽງກັນ ຂຶ້ນໃນຖິ່ນແຫ້ງແລ້ງກັນດານ; ແລະ ຊາວເລມັນເລີ່ມ ຕາມຂ້າ ລູກຫລານຂອງອະມິວລອນ ແລະ ພີ່ນ້ອງຂອງພວກເຂົາ ແລະ ເລີ່ມຂ້າພວກເຂົາ; ແລະ ພວກເຂົາກໍໄດ້ປົບໜີເຂົ້າໄປໃນຖິ່ນ ແຫ້ງແລ້ງກັນດານທາງຕາເວັນອອກ.

Alma 25

And behold, now it came to pass that those Lamanites were more angry because they had slain their brethren; therefore they swore vengeance upon the Nephites; and they did no more attempt to slay the people of Anti-Nephi-Lehi at that time.

But they took their armies and went over into the borders of the land of Zarahemla, and fell upon the people who were in the land of Ammonihah and destroyed them.

And after that, they had many battles with the Nephites, in the which they were driven and slain.

And among the Lamanites who were slain were almost all the seed of Amulon and his brethren, who were the priests of Noah, and they were slain by the hands of the Nephites;

And the remainder, having fled into the east wilderness, and having usurped the power and authority over the Lamanites, caused that many of the Lamanites should perish by fire because of their belief—

For many of them, after having suffered much loss and so many afflictions, began to be stirred up in remembrance of the words which Aaron and his brethren had preached to them in their land; therefore they began to disbelieve the traditions of their fathers, and to believe in the Lord, and that he gave great power unto the Nephites; and thus there were many of them converted in the wilderness.

And it came to pass that those rulers who were the remnant of the children of Amulon caused that they should be put to death, yea, all those that believed in these things.

Now this martyrdom caused that many of their brethren should be stirred up to anger; and there began to be contention in the wilderness; and the Lamanites began to hunt the seed of Amulon and his brethren and began to slay them; and they fled into the east wilderness.

ຈ ແລະ ຈົ່ງເບິ່ງ ພວກເຂົາຖືກຊາວເລມັນຕາມຂ້າຈົນເຖິງມື້ນີ້. ດັ່ງນັ້ນຄຳເວົ້າຂອງອະບິນາໄດຈຶ່ງເຮັດໃຫ້ເກີດຄວາມຈິງຂຶ້ນມາ ແນວນີ້, ຊຶ່ງເພິ່ນໄດ້ເວົ້າໄວ້ກ່ຽວກັບລູກຫລານຂອງພວກ ປະໂລຫິດ ຜູ້ທີ່ເຮັດໃຫ້ເພິ່ນຕ້ອງໄດ້ຮັບຄວາມຕາຍດ້ວຍໄຟ.

ຈ ເພາະເພິ່ນໄດ້ເວົ້າກັບພວກເຂົາວ່າ: ສິ່ງໃດກໍຕາມທີ່ພວກເຈົ້າ ກະທຳຕໍ່ຂ້າພະເຈົ້າ ນີ້ຈະເປັນຮູບແບບຂອງສິ່ງທີ່ຈະມາເຖິງ.

ຈ ແລະ ບັດນີ້ອະບິນາໄດເປັນຄົນທຳອິດທີ່ຕ້ອງຮັບ ຄວາມຕາຍ ດ້ວຍໄຟ; ຍ້ອນວ່າຄວາມເຊື່ອຖືຂອງເພິ່ນໃນພຣະເຈົ້າ; ບັດນີ້ ນີ້ ຄືສິ່ງທີ່ເພິ່ນໝາຍເຖິງຄື ຫລາຍຄົນຈະຕ້ອງໄດ້ຮັບຄວາມຕາຍ ດ້ວຍໄຟຄືກັນກັບທີ່ເພິ່ນໄດ້ຮັບ.

ຈ ແລະ ເພິ່ນໄດ້ເວົ້າກັບພວກປະໂລຫິດຂອງໂນອາວ່າ ລູກ ຫລານຂອງພວກເຂົາຈະເຮັດໃຫ້ຄົນເປັນຈຳນວນຫລວງຫລາຍ ທີ່ຈຳເປັນຕ້ອງຕາຍໃນວິທີດຽວກັບເພິ່ນ, ແລະ ວ່າພວກເຂົາຈະ ແຕກພັດພາກຈາກກັນໄປທົ່ວທີບ ແລະ ຖືກຂ້າຕາຍຄືກັນກັບ ແກະທີ່ບໍ່ມີຜູ້ລ້ຽງ, ຖືກຂັບໄລ່ໄປ ແລະ ຖືກສັດປ່າຂ້າຕາຍອີກ; ແລະ ບັດນີ້ຈົ່ງເບິ່ງ, ຄຳເວົ້າເຫລົ່ານີ້ໄດ້ປະກົດເປັນຄວາມຈິງ ແລ້ວ, ເພາະວ່າພວກເຂົາຖືກຊາວເລມັນຂັບໄລ່ໄປ ແລະຖືກລ່າ ແລະ ຖືກທຸບຕີ.

ຈ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອຊາວເລມັນເຫັນວ່າ ຕົນເອງເອົາຊະນະຊາວນີໄຟບໍ່ໄດ້ ພວກເຂົາຈຶ່ງໄດ້ກັບຄືນໄປຫາ ແຜ່ນດິນຂອງຕົນອີກ; ແລະ ຫລາຍຄົນໄດ້ຂ້າມມາຢູ່ໃນ ແຜ່ນດິນອິດຊະມາເອນ ແລະ ຢູ່ໃນແຜ່ນດິນນີໄຟ; ແລະ ໄດ້ ລວມຕົວເຂົ້າກັບຜູ້ຄົນຂອງພຣະເຈົ້າ, ຊຶ່ງເປັນຜູ້ຄົນຂອງ ອານ ໄທ-ນີໄຟ-ລີໄຮ.

ຈ ແລະ ພວກເຂົາໄດ້ ຝັງອາວຸດແຫ່ງສົງຄາມຂອງພວກເຂົາໄວ້, ຄືກັນກັບພີ່ນ້ອງຂອງພວກເຂົາໄດ້ກະທຳໄປ, ແລະ ພວກເຂົາ ເລີ່ມເປັນຄົນຊອບທຳ; ແລະ ພວກເຂົາໄດ້ເດີນໃນທາງຂອງ ພຣະຜູ້ເປັນເຈົ້າ, ແລະ ໄດ້ຍຶດຖືທີ່ຈະຮັກສາພຣະບັນຍັດ ແລະ ຂໍ້ ກຳນົດຂອງພຣະອົງ.

ຈ ແທ້ຈິງແລ້ວ, ແລະ ພວກເຂົາໄດ້ຮັກສາກົດຂອງໂມເຊ. ເພາະ ມັນເປັນການສົມຄວນທີ່ພວກເຂົາຕ້ອງຮັກສາກົດຂອງໂມເຊໄວ້, ເພາະຍັງບໍ່ສົມບູນທັງໝົດ. ແຕ່ເຖິງແມ່ນມີ ກົດຂອງໂມເຊ ພວກເຂົາຍັງໄດ້ມຸ້ງຫາການສະເດັດມາຂອງພຣະຄຣິດ ໂດຍ ຖືວ່າກົດຂອງໂມເຊເປັນ ແບບໜຶ່ງຂອງການສະເດັດມາຂອງ ພຣະອົງ, ແລະ ໂດຍເຊື່ອວ່າພວກເຂົາຕ້ອງຮັກສາການປະຕິບັດ ພາຍນອກເຫລົ່ານັ້ນໄວ້ຈົນເຖິງເວລາທີ່ພຣະອົງຈະເປັນທີ່ ເປີດເຜີຍແກ່ພວກເຂົາ.

And behold they are hunted at this day by the Lamanites. Thus the words of Abinadi were brought to pass, which he said concerning the seed of the priests who caused that he should suffer death by fire.

For he said unto them: What ye shall do unto me shall be a type of things to come.

And now Abinadi was the first that suffered death by fire because of his belief in God; now this is what he meant, that many should suffer death by fire, according as he had suffered.

And he said unto the priests of Noah that their seed should cause many to be put to death, in the like manner as he was, and that they should be scattered abroad and slain, even as a sheep having no shepherd is driven and slain by wild beasts; and now behold, these words were verified, for they were driven by the Lamanites, and they were hunted, and they were smitten.

And it came to pass that when the Lamanites saw that they could not overpower the Nephites they returned again to their own land; and many of them came over to dwell in the land of Ishmael and the land of Nephi, and did join themselves to the people of God, who were the people of Anti-Nephi-Lehi.

And they did also bury their weapons of war, according as their brethren had, and they began to be a righteous people; and they did walk in the ways of the Lord, and did observe to keep his commandments and his statutes.

Yea, and they did keep the law of Moses; for it was expedient that they should keep the law of Moses as yet, for it was not all fulfilled. But notwithstanding the law of Moses, they did look forward to the coming of Christ, considering that the law of Moses was a type of his coming, and believing that they must keep those outward performances until the time that he should be revealed unto them.

ບັດນີ້ພວກເຂົາບໍ່ຄິດວ່າ ຄວາມລອດຈະມາເຖິງໂດຍກົດຂອງ
ໂມເຊ; ແຕ່ວ່າ ກົດຂອງໂມເຊມີໄວ້ເພື່ອໃຫ້ສັດທາຂອງພວກເຂົາ
ໝັ້ນຄົງໃນພຣະຄຣິດ; ແລະ ພວກເຂົາຕັ້ງໝັ້ນໃນ ຄວາມຫວັງ
ດ້ວຍສັດທາ, ຈົນເຖິງຄວາມລອດນິລັນດອນ, ໂດຍຫວັງໃນ
ວິນຍານແຫ່ງການທຳນາຍ ຊຶ່ງກ່າວເຖິງສິ່ງທີ່ຈະມາເຖິງ.

ແລະ ບັດນີ້ຈົ່ງເບິ່ງ, ອຳໂມນ, ແລະ ອາໂຣນ, ແລະ ອອມເນີ,
ແລະ ຮິມໄນ, ແລະ ພີ່ນ້ອງຂອງພວກເຂົາ ມີຄວາມປີຕິຍິນດີຢ່າງ
ຍິ່ງ ເພາະຄວາມສຳເລັດທີ່ພວກເຂົາມີໃນບັນດາຊາວເລມັນ ໂດຍ
ເຫັນວ່າພຣະຜູ້ເປັນເຈົ້າໄດ້ປະທານໃຫ້ພວກເຂົາຕາມ ຄຳ
ອະທິຖານຂອງພວກເຂົາ ແລະ ວ່າພຣະອົງໄດ້ເຮັດໃຫ້ພຣະຄຳ
ຂອງພຣະອົງ ປະກົດເປັນຈິງແກ່ພວກເຂົາຢ່າງຄົບຖ້ວນແລ້ວ.

Now they did not suppose that salvation came by the law of Moses; but the law of Moses did serve to strengthen their faith in Christ; and thus they did retain a hope through faith, unto eternal salvation, relying upon the spirit of prophecy, which spake of those things to come.

And now behold, Ammon, and Aaron, and Omner, and Himni, and their brethren did rejoice exceedingly, for the success which they had had among the Lamanites, seeing that the Lord had granted unto them according to their prayers, and that he had also verified his word unto them in every particular.

ແອວມາ ๔ผ

๑ ແລະ ບັດນີ້, ນີ້ຄືຄຳເວົ້າຂອງອຳໂມນທີ່ລາວໄດ້ເວົ້າກັບພີ່ນ້ອງ ຂອງລາວ, ມີຄວາມວ່າດັ່ງນີ້: ພີ່ນ້ອງ ແລະ ໝູ່ເພື່ອນຂອງ ຂ້າພະເຈົ້າ, ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບພວກທ່ານວ່າ ພວກເຮົາ ມີເຫດຜົນທີ່ຈະມີຄວາມປີຕິຍິນດີຫລາຍຂະໜາດໃດ; ເພາະ ພວກເຮົາຄິດໄດ້ບໍວ່າ ເວລາພວກເຮົາ ໄດ້ອອກຈາກແຜ່ນດິນ ເຊຣາເຮັມລາມາ ພຣະເຈົ້າຈະປະທານພອນອັນຍິ່ງໃຫຍ່ແບບນີ້ ໃຫ້ແກ່ພວກເຮົາ?

๒ ແລະ ບັດນີ້, ຂ້າພະເຈົ້າຖາມວ່າ, ພອນອັນຍິ່ງໃຫຍ່ອັນໃດທີ່ ພຣະອົງໄດ້ປະທານໃຫ້ແກ່ພວກເຮົາ? ພວກທ່ານບອກໄດ້ບໍ່?

๓ ຈົ່ງເບິ່ງ, ຂ້າພະເຈົ້າຈະຕອບແທນພວກທ່ານ, ເພາະວ່າຊາວ ເລມັນ ຜູ້ເປັນພີ່ນ້ອງຂອງພວກເຮົາໄດ້ຢູ່ໃນຄວາມມືດ, ແທ້ຈິງ ແລ້ວ, ແມ່ນຢູ່ໃນເຫວເລິກທີ່ມືດທີ່ສຸດ, ແຕ່ຈົ່ງເບິ່ງ, ມີ ຫລາຍ ຄົນປານໃດໃນພວກເຂົາທີ່ຖືກນຳມາໃຫ້ເຫັນຄວາມແຈ້ງອັນ ໜ້າອັດສະຈັນຂອງພຣະເຈົ້າ! ແລະ ນີ້ຄືພອນຊຶ່ງພຣະອົງໄດ້ ປະທານໃຫ້ແກ່ພວກເຮົາ, ຊຶ່ງເຮັດໃຫ້ພວກເຮົາເປັນ ເຄື່ອງມືໃນ ພຣະຫັດຂອງພຣະເຈົ້າ ເພື່ອນຳເອົາຜົນງານອັນຍິ່ງໃຫຍ່ນີ້ມາ.

๔ ຈົ່ງເບິ່ງ ພວກເຂົາເປັນ ພັນໆຄົນມີຄວາມປີຕິຍິນດີ ແລະ ຖືກ ນຳມາເຂົ້າຝູງຂອງພຣະເจ้า.

๕ ຈົ່ງເບິ່ງ, ເຂົ້າຢູ່ໃນ ທົ່ງສຸກແລ້ວ ແລະ ພວກທ່ານເປັນສຸກ ແລ້ວ, ເພາະພວກທ່ານໄດ້ອອກແຮງງານດ້ວຍ ກ່ຽວ ແລະ ໄດ້ ເກັບກ່ຽວດ້ວຍສຸດກຳລັງຂອງພວກທ່ານ, ແທ້ຈິງແລ້ວ, ພວກ ທ່ານໄດ້ອອກແຮງງານຕະຫລອດທັງວັນ; ແລະ ຈົ່ງເບິ່ງ, ຈຳນວນ ຟ່ອນເຂົ້າຂອງພວກທ່ານ! ແລະ ມັນຈະຖືກເກັບໄວ້ໃນ ເລົ້າເພື່ອມັນຈະບໍ່ເສຍຫາຍໄປ.

๖ ແທ້ຈິງແລ້ວ, ມັນຈະບໍ່ຖືກລົມພະຍຸພັດໄປໃນວັນສຸດທ້າຍ; ແທ້ຈິງແລ້ວ, ມັນກໍຈະບໍ່ຖືກລົມບ້າໝູພັດຫອບໄປ, ແຕ່ເມື່ອ ລົມພະຍຸມາ ມັນຈະຖືກຮວບຮວມຄ້ວໄວ້ນຳກັນຢູ່ໃນບ່ອນຂອງ ມັນ, ເພື່ອລົມພະຍຸຈະເຂົ້າເຖິງມັນບໍ່ໄດ້; ແທ້ຈິງແລ້ວ, ມັນຈະບໍ່ ຖືກພະຍຸຮ້າຍພັດໄປບ່ອນໃດທີ່ສັດຕູຕ້ອງການຈະພາມັນໄປ.

๗ ແຕ່ຈົ່ງເບິ່ງ, ມັນຢູ່ໃນພຣະຫັດຂອງພຣະຜູ້ເປັນເจ้า ແລະ ໃນ ລະດູຂອງການເກັບກ່ຽວ, ແລະ ມັນເປັນຂອງພຣະອົງ; ແລະ ພຣະອົງຈະ ຍົກມັນຂຶ້ນໃນວັນສຸດທ້າຍ.

๘ ຂໍພຣະນາມຂອງພຣະເจ้าຂອງພວກເຮົາຈົ່ງພຣະກະເສີມ ສຳລານເຖິດ, ຈົ່ງຂໍໃຫ້ພວກເຮົາ ຮ້ອງເພງສັນລະເສີນພຣະອົງ ເຖິດ, ແທ້ຈິງແລ້ວ, ຂໍໃຫ້ພວກເຮົາຖວາຍ ຄວາມຂອບພຣະໄທ ແດ່ພຣະນາມອັນສັກສິດຂອງພຣະອົງເຖິດ, ເພາະວ່າພຣະອົງ ໄດ້ເຮັດວຽກງານອັນຊອບທຳຕະຫລອດການ.

Alma 26

And now, these are the words of Ammon to his brethren, which say thus: My brothers and my brethren, behold I say unto you, how great reason have we to rejoice; for could we have supposed when we started from the land of Zarahemla that God would have granted unto us such great blessings?

And now, I ask, what great blessings has he bestowed upon us? Can ye tell?

Behold, I answer for you; for our brethren, the Lamanites, were in darkness, yea, even in the darkest abyss, but behold, how many of them are brought to behold the marvelous light of God! And this is the blessing which hath been bestowed upon us, that we have been made instruments in the hands of God to bring about this great work.

Behold, thousands of them do rejoice, and have been brought into the fold of God.

Behold, the field was ripe, and blessed are ye, for ye did thrust in the sickle, and did reap with your might, yea, all the day long did ye labor; and behold the number of your sheaves! And they shall be gathered into the garners, that they are not wasted.

Yea, they shall not be beaten down by the storm at the last day; yea, neither shall they be harrowed up by the whirlwinds; but when the storm cometh they shall be gathered together in their place, that the storm cannot penetrate to them; yea, neither shall they be driven with fierce winds whithersoever the enemy listeth to carry them.

But behold, they are in the hands of the Lord of the harvest, and they are his; and he will raise them up at the last day.

Blessed be the name of our God; let us sing to his praise, yea, let us give thanks to his holy name, for he doth work righteousness forever.

ຄ ຖ້າຫາກ ພວກເຮົາບໍ່ໄດ້ຈາກແຜ່ນດິນເຊຣາເຮັມລາແລ້ວ, ພີ່ນ້ອງທີ່ຮັກຂອງພວກເຮົາເຫລົ່ານີ້ ຜູ້ຊຶ່ງຮັກພວກເຮົາທີ່ສຸດ ຈະຍັງຄົງທໍລະມານຢູ່ດ້ວຍ ຄວາມກຽດຊັງພວກເຮົາ, ແທ້ຈິງ ແລ້ວ, ພວກເຂົາຈະເປັນຄົນແປກໜ້າຕໍ່ພຣະເຈົ້າ.

For if we had not come up out of the land of Zarahemla, these our dearly beloved brethren, who have so dearly beloved us, would still have been racked with hatred against us, yea, and they would also have been strangers to God.

ຄ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອອໍາໂມນກ່າວຂໍ້ຄວາມນີ້ ແລ້ວ, ອາໂຣນນ້ອງຊາຍຂອງລາວກໍຕິຕຽນລາວ, ໂດຍເວົ້າວ່າ: ອໍາໂມນ, ຂ້ອຍຢ້ານວ່າຄວາມປີຕິຍິນດີຂອງເຈົ້າໄດ້ພາໃຫ້ເຈົ້າໄປ ຫາການອວດອ້າງເສຍແລ້ວ.

And it came to pass that when Ammon had said these words, his brother Aaron rebuked him, saying: Ammon, I fear that thy joy doth carry thee away unto boasting.

ຄ ແຕ່ອໍາໂມນໄດ້ເວົ້າກັບລາວວ່າ: ຂ້ອຍບໍ່ໄດ້ ອວດອ້າງໃນ ພະລັງຂອງຕົນເອງ ຫລື ໃນປັນຍາຂອງຕົນເອງ; ແຕ່ຈົ່ງເບິ່ງ, ຄວາມສຸກຂອງຂ້ອຍເຕັມປ່ຽມ, ແທ້ຈິງແລ້ວ, ໃຈຂອງຂ້ອຍເຕັມ ໄປດ້ວຍຄວາມສຸກ, ແລະ ຂ້ອຍຈະປີຕິຍິນດີໃນພຣະເຈົ້າຂອງ ຂ້ອຍ.

But Ammon said unto him: I do not boast in my own strength, nor in my own wisdom; but behold, my joy is full, yea, my heart is brim with joy, and I will rejoice in my God.

ຄ ແທ້ຈິງແລ້ວ, ຂ້ອຍຮູ້ວ່າ ຂ້ອຍບໍ່ມີຄ່າອັນໃດເລີຍ; ຖ້າອາໄສ ພະລັງຂອງຂ້ອຍເອງ ຂ້ອຍກໍອ່ອນແອ; ສະນັ້ນ ຂ້ອຍຈະບໍ່ ອວດອ້າງເຖິງເລື່ອງຕົວເອງ, ແຕ່ຂ້ອຍຈະອວດອ້າງພຣະເຈົ້າ ຂອງຂ້ອຍ, ເພາະໃນ ພະລັງຂອງພຣະອົງ; ຂ້ອຍສາມາດເຮັດໄດ້ ທຸກສິ່ງທຸກຢ່າງ; ແທ້ຈິງແລ້ວ, ຈົ່ງເບິ່ງ, ພວກເຮົາໄດ້ກະທໍາສິ່ງ ມະຫັດສະຈັນອັນຍິ່ງໃຫຍ່ຫລາຍຢ່າງມາແລ້ວໃນແຜ່ນດິນນີ້, ຊຶ່ງພວກເຮົາຈະສັນລະເສີນພຣະນາມຂອງພຣະອົງຕະຫລອດ ການ.

Yea, I know that I am nothing; as to my strength I am weak; therefore I will not boast of myself, but I will boast of my God, for in his strength I can do all things; yea, behold, many mighty miracles we have wrought in this land, for which we will praise his name forever.

ຄ ຈົ່ງເບິ່ງ, ພີ່ນ້ອງຂອງພວກເຮົາມີຈັກພັນຄົນແລ້ວທີ່ພຣະອົງ ໄດ້ປົດປ່ອຍອອກຈາກຄວາມເຈັບປວດແຫ່ງ ນະລົກ ແລະ ນໍາມາ ຮ້ອງສັນລະເສີນຕໍ່ຄວາມຮັກທີ່ໄຖ່, ແລະ ນີ້ເປັນເພາະອໍານາດ ຂອງພຣະຄໍາຂອງພຣະອົງ ຊຶ່ງຢູ່ກັບພວກເຮົາ, ສະນັ້ນ ພວກ ເຮົາບໍ່ມີເຫດຜົນອັນຍິ່ງໃຫຍ່ທີ່ຈະປີຕິຍິນດີບໍ?

Behold, how many thousands of our brethren has he loosed from the pains of hell; and they are brought to sing redeeming love, and this because of the power of his word which is in us, therefore have we not great reason to rejoice?

ຄ ແທ້ຈິງແລ້ວ, ພວກເຮົາມີເຫດຜົນທີ່ຈະສັນລະເສີນພຣະອົງ ຕະຫລອດໄປ, ເພາະພຣະອົງເປັນພຣະເຈົ້າສູງສຸດ, ແລະ ໄດ້ ປົດປ່ອຍພີ່ນ້ອງຂອງພວກເຮົາອອກຈາກ ໂສ້ແຫ່ງນະລົກ.

Yea, we have reason to praise him forever, for he is the Most High God, and has loosed our brethren from the chains of hell.

ຄ ແທ້ຈິງແລ້ວ, ພວກເຂົາຖືກປົດລ້ອມດ້ວຍຄວາມພິນາດ ແລະ ຄວາມມືດອັນເປັນນິດ; ແຕ່ຈົ່ງເບິ່ງ, ພຣະອົງໄດ້ນໍາເອົາພວກ ເຂົາມາຫາ ຄວາມສະຫວ່າງອັນເປັນນິດຂອງພຣະອົງ, ແທ້ຈິງ ແລ້ວ, ມາຫາຄວາມລອດອັນເປັນນິດ; ແລະ ພວກເຂົາຖືກ ປົດລ້ອມດ້ວຍຄວາມຮັກອັນລົ້ນເຫລືອຂອງພຣະອົງ ອັນຫາທີ່ ປຽບບໍ່ໄດ້; ແທ້ຈິງແລ້ວ, ແລະ ພວກເຮົາໄດ້ເປັນເຄື່ອງມືໃນ ພຣະຫັດຂອງພຣະອົງໃນການເຮັດສິ່ງທີ່ຍິ່ງໃຫຍ່ ແລະ ໜ້າ ອັດສະຈັນນີ້.

Yea, they were encircled about with everlasting darkness and destruction; but behold, he has brought them into his everlasting light, yea, into everlasting salvation; and they are encircled about with the matchless bounty of his love; yea, and we have been instruments in his hands of doing this great and marvelous work.

ສະນັ້ນ, ຂໍໃຫ້ພວກເຮົາຈົ່ງ ປາບປື້ມເຖີດ, ແທ້ຈິງແລ້ວ, ພວກເຮົາຈະ ປາບປື້ມໃນພຣະຜູ້ເປັນເຈົ້າ; ແທ້ຈິງແລ້ວ, ພວກເຮົາຈະປິຕິຍິນດີ ເພາະວ່າຄວາມຜາສຸກຂອງພວກເຮົາ ເຕັມປ່ຽມ; ແທ້ຈິງແລ້ວ, ພວກເຮົາຈະສັນລະເສີນພຣະເຈົ້າຂອງ ພວກເຮົາຕະຫລອດໄປ. ຈົ່ງເບິ່ງ, ຜູ້ໃດຈະປາບປື້ມໃນພຣະຜູ້ ເປັນເຈົ້າໄດ້ຫລາຍເກີນໄປ? ແທ້ຈິງແລ້ວ, ຜູ້ໃດຈະໄດ້ເວົ້າຫລາຍ ເກີນໄປເຖິງອຳນາດອັນຍິ່ງໃຫຍ່ຂອງພຣະອົງ, ແລະ ເຖິງ ຄວາມ ເມດຕາ, ແລະ ເຖິງຄວາມອົດກັ້ນຂອງພຣະອົງທີ່ມີຕໍ່ລູກຫລານ ມະນຸດທັງປວງ? ຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບພວກທ່ານว่า ຂ້າພະເຈົ້າບໍ່ສາມາດເວົ້າແມ່ນແຕ່ສ່ວນໜ້ອຍໜຶ່ງຂອງຄວາມ ຮູ້ສຶກຂອງຂ້າພະເຈົ້າ.

Therefore, let us glory, yea, we will glory in the Lord; yea, we will rejoice, for our joy is full; yea, we will praise our God forever. Behold, who can glory too much in the Lord? Yea, who can say too much of his great power, and of his mercy, and of his long-suffering towards the children of men? Behold, I say unto you, I cannot say the smallest part which I feel.

ແລະ ຜູ້ໃດຈະຄິດວ່າພຣະເຈົ້າຂອງພວກເຮົາຈະເມດຕາປານີ ຫລາຍປານນີ້ ເຖິງກັບວ່າພຣະອົງຍາດເອົາພວກເຮົາອອກຈາກ ສະພາບອັນເປັນຕາຢ້ານ ແລະ ເຕັມໄປດ້ວຍບາບ ແລະ ຄວາມ ເປິເປື້ອນຂອງພວກເຮົາ?

Who could have supposed that our God would have been so merciful as to have snatched us from our awful, sinful, and polluted state?

ຈົ່ງເບິ່ງ, ພວກເຮົາໄດ້ອອກໄປໃນຄວາມໂມโห, ດ້ວຍການຄຸກ ຄາມຢ່າງໜັກທີ່ຈະ ທຳລາຍສາດສະໜາຈັກຂອງພຣະອົງ.

Behold, we went forth even in wrath, with mighty threatenings to destroy his church.

ໂອ້ ແລ້ວເປັນຫຍັງພຣະອົງຈົ່ງບໍ່ສົ່ງພວກເຮົາໄປສູ່ຄວາມ ພິນາດອັນເປັນຕາຢ້ານນັ້ນ, ແທ້ຈິງແລ້ວ, ເປັນຫຍັງພຣະອົງ ຈົ່ງບໍ່ປ່ອຍດາບແຫ່ງຄວາມຍຸດຕິທຳຂອງພຣະອົງຕົກລົງມາໃສ່ ພວກເຮົາ, ແລະ ກຳນົດໃຫ້ພວກເຮົາໄປຫາຄວາມໝົດຫວັງຊົ່ວ ນິລັນດອນ?

Oh then, why did he not consign us to an awful destruction, yea, why did he not let the sword of his justice fall upon us, and doom us to eternal despair?

ໂອ້ ຈິດວິນຍານຂອງຂ້າພະເຈົ້າເອີຍ, ເກືອບຄືກັບว่า ມັນຈະ ໝົ້ໄປເມື່ອຄິດໄປແລ້ວ. ຈົ່ງເບິ່ງ, ພຣະອົງບໍ່ໄດ້ໃຊ້ຄວາມຍຸດຕິທຳ ຂອງພຣະອົງກັບພວກເຮົາ, ແຕ່ໃນພຣະເມດຕາປານີອັນຍິ່ງ ໃຫຍ່ຂອງພຣະອົງ, ພຣະອົງໄດ້ນຳພາພວກເຮົາອອກຈາກ ເຫວ ເລິກແຫ່ງຄວາມຕາຍ, ແລະ ຄວາມທຸກທໍລະມານອັນເປັນນິດ, ຈົນກະທັ່ງມາສູ່ຄວາມລອດຂອງຈິດວິນຍານຂອງພວກເຮົາ.

Oh, my soul, almost as it were, fleeth at the thought. Behold, he did not exercise his justice upon us, but in his great mercy hath brought us over that everlasting gulf of death and misery, even to the salvation of our souls.

ແລະ ບັດນີ້ຈົ່ງເບິ່ງ, ພີ່ນ້ອງຂອງຂ້າພະເຈົ້າ, ມີ ມະນຸດທີ່ມີ ຈິດໃຈທຳມະດາຜູ້ໃດທີ່ຈະຮູ້ຈັກເລື່ອງເຫລົ່ານີ້? ຂ້າພະເຈົ້າກ່າວ ກັບພວກເຈົ້າว่า, ບໍ່ມີເລີຍ, ບໍ່ມີຜູ້ໃດທີ່ຈະ ຮູ້ຈັກເລື່ອງເຫລົ່ານີ້, ນອກຈາກຄົນທີ່ສຳນຶກຜິດແລ້ວ.

And now behold, my brethren, what natural man is there that knoweth these things? I say unto you, there is none that knoweth these things, save it be the penitent.

ແທ້ຈິງແລ້ວ, ຜູ້ທີ່ ກັບໃຈ ແລະ ສະແດງ ສັດທາ, ແລະ ນຳ ເອົາວຽກງານດີອອກມາ, ແລະ ອະທິຖານສະໝ່ຳສະເໝີຢ່າງບໍ່ ທໍ້ຖອຍ—ແລ້ວພຣະເຈົ້າຈະເຮັດໃຫ້ຄົນເຊັ່ນນັ້ນຮູ້ເຖິງ ຄວາມ ລຶກລັບຂອງພຣະເຈົ້າ; ແທ້ຈິງແລ້ວ, ພຣະອົງຈະມອບການ ເປີດເຜີຍເຖິງສິ່ງທີ່ບໍ່ເຄີຍເປີດເຜີຍມາກ່ອນໃຫ້ແກ່ຄົນແບບນັ້ນ; ແທ້ຈິງແລ້ວ, ພຣະອົງຈະປະທານໃຫ້ແກ່ຄົນແບບນັ້ນ ເພື່ອຈະ ໄດ້ນຳພາຄົນເປັນຈຳນວນພັນໆມາສູ່ການກັບໃຈ, ເໝືອນດັ່ງ ພຣະອົງເຄີຍໄດ້ປະທານໃຫ້ແກ່ພວກເຮົາມາແລ້ວ ເພື່ອນຳພາ ພີ່ນ້ອງເຫລົ່ານີ້ຂອງພວກເຮົາມາສູ່ການກັບໃຈ.

Yea, he that repenteth and exerciseth faith, and bringeth forth good works, and prayeth continually without ceasing—unto such it is given to know the mysteries of God; yea, unto such it shall be given to reveal things which never have been revealed; yea, and it shall be given unto such to bring thousands of souls to repentance, even as it has been given unto us to bring these our brethren to repentance.

ຄ.ນ ບັດນີ້ພີ່ນ້ອງຂອງຂ້າພະເຈົ້າເອີຍ, ພວກທ່ານຈື່ໄດ້ບໍ່ວ່າ ພວກເຮົາໄດ້ເວົ້າກັບພີ່ນ້ອງຂອງພວກເຮົາຜູ້ທີ່ອາໄສຢູ່ໃນແຜ່ນດິນເຊຣາເຮັມລາວ່າ, ພວກເຮົາຈະຂຶ້ນໄປຫາແຜ່ນດິນນີໄຟ ເພື່ອສັ່ງສອນຊາວເລມັນຜູ້ເປັນພີ່ນ້ອງຂອງພວກເຮົາແລ້ວ ພວກເຂົາກໍຫົວເຍາະເຍີ້ຍພວກເຮົາ?

Now do ye remember, my brethren, that we said unto our brethren in the land of Zarahemla, we go up to the land of Nephi, to preach unto our brethren, the Lamanites, and they laughed us to scorn?

ຄ.ສ ພວກເຂົາໄດ້ເວົ້າກັບພວກເຮົາວ່າ: ພວກເຈົ້າຄິດບໍ່ວ່າ ພວກເຈົ້າຈະນຳເອົາຊາວເລມັນມາຫາຄວາມຮູ້ເລື່ອງຄວາມຈິງໄດ້? ພວກເຈົ້າຄິດບໍ່ວ່າພວກເຈົ້າຈະເຮັດໃຫ້ຊາວເລມັນສຳນຶກເຖິງຄວາມບໍ່ຖືກຕ້ອງຂອງ ຮີດຄອງປະເພນີຂອງບັນພະບຸລຸດຂອງພວກເຂົາໄດ້ ເພາະວ່າພວກເຂົາເປັນຄົນ ແຂງຄໍ; ຊຶ່ງໃຈຂອງພວກເຂົາຊື່ນຊົມໃນການນອງເລືອດ; ຊຶ່ງເວລາຂອງພວກເຂົາ ຖືກໃຊ້ມົ້ວສຸມຢູ່ກັບຄວາມຊົ່ວຮ້າຍທີ່ສຸດ; ຊຶ່ງທາງຂອງພວກເຂົາເປັນທາງຂອງຄົນລ່ວງລະເມີດມາຕັ້ງແຕ່ຕົ້ນ? ບັດນີ້ພີ່ນ້ອງຂອງຂ້າພະເຈົ້າ, ພວກທ່ານຈົ່ງຈື່ຈຳໄວ້ວ່າ ນີ້ຄືຄຳເວົ້າຂອງພວກເຂົາ.

For they said unto us: Do ye suppose that ye can bring the Lamanites to the knowledge of the truth? Do ye suppose that ye can convince the Lamanites of the incorrectness of the traditions of their fathers, as stiffnecked a people as they are; whose hearts delight in the shedding of blood; whose days have been spent in the grossest iniquity; whose ways have been the ways of a transgressor from the beginning? Now my brethren, ye remember that this was their language.

ຄ.ສ ແລະ ຍິ່ງໄປກວ່ານັ້ນ ພວກເຂົາໄດ້ເວົ້າວ່າ: ໃຫ້ພວກເຮົາຈັບອາວຸດຂຶ້ນສູ້ຮົບກັບພວກເຂົາເທາະ, ເພື່ອພວກເຮົາຈະໄດ້ທຳລາຍພວກເຂົາ ແລະ ທຳລາຍຄວາມຊົ່ວຮ້າຍຂອງພວກເຂົາ ອອກໄປຈາກແຜ່ນດິນນີ້, ຖ້າບໍ່ດັ່ງນັ້ນ ພວກເຂົາຈະມາຢຽບຍ່ຳ ແລະ ທຳລາຍພວກເຮົາ.

And moreover they did say: Let us take up arms against them, that we destroy them and their iniquity out of the land, lest they overrun us and destroy us.

ຄ.ຈ ແຕ່ ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າເອີຍ, ພວກເຮົາໄດ້ເຂົ້າມາໃນຖິ່ນແຫ້ງແລ້ງກັນດານ ບໍ່ແມ່ນມີເຈດຕະນາທີ່ຈະທຳລາຍພີ່ນ້ອງຂອງພວກເຮົາ, ແຕ່ມີເຈດຕະນາວ່າ ບາງທີ ພວກເຮົາອາດຈະໄດ້ຊ່ວຍເຫລືອຄົນບາງຄົນໃຫ້ລອດພົ້ນ.

But behold, my beloved brethren, we came into the wilderness not with the intent to destroy our brethren, but with the intent that perhaps we might save some few of their souls.

ຄ.ຊ ບັດນີ້ເມື່ອໃຈຂອງພວກເຮົາທໍ້ຖອຍ ແລະ ພວກເຮົາເກືອບຈະກັບຄືນໄປ, ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າ ໄດ້ ປອບໃຈພວກເຮົາ, ແລະ ກ່າວວ່າ: ຈົ່ງອອກໄປໃນບັນດາຊາວເລມັນ, ພີ່ນ້ອງຂອງພວກເຈົ້າ, ຈົ່ງຮັບເອົາ ຄວາມທຸກຂອງພວກເຈົ້າດ້ວຍ ຄວາມອົດທົນ, ແລະ ເຮົາຈະມອບຄວາມສຳເລັດໃຫ້ແກ່ພວກເຈົ້າ.

Now when our hearts were depressed, and we were about to turn back, behold, the Lord comforted us, and said: Go amongst thy brethren, the Lamanites, and bear with patience thine afflictions, and I will give unto you success.

ຄ.ຍ ແລະ ບັດນີ້ຈົ່ງເບິ່ງ, ພວກເຮົາໄດ້ມາ ແລະ ອອກໄປຢູ່ໃນບັນດາພວກເຂົາ ແລະ ພວກເຮົາໄດ້ອົດທົນໃນຄວາມທຸກທໍລະມານຂອງພວກເຮົາ, ແລະ ພວກເຮົາໄດ້ອົດທົນຕໍ່ຄວາມຂາດແຄນທຸກຢ່າງ; ແທ້ຈິງແລ້ວ, ພວກເຮົາເດີນທາງໄປຫາເຮືອນນີ້ເຮືອນນັ້ນ, ໄວ້ວາງໃຈຕາມຄວາມເມດຕາປານີຂອງໂລກ—ບໍ່ພຽງແຕ່ຄວາມເມດຕາປານີຂອງໂລກເທົ່ານັ້ນ ແຕ່ໃນພຣະເມດຕາປານີຂອງພຣະເຈົ້ານຳອີກ.

And now behold, we have come, and been forth amongst them; and we have been patient in our sufferings, and we have suffered every privation; yea, we have traveled from house to house, relying upon the mercies of the world—not upon the mercies of the world alone but upon the mercies of God.

๘๗ ແລະ ພວກເຮົາໄດ້ເຂົ້າໄປໃນເຮືອນຂອງພວກເຂົາ ແລະ ໄດ້ສິດສອນພວກເຂົາ, ແລະ ພວກເຮົາໄດ້ສິດສອນພວກເຂົາຕາມຖະໜົນຫົນທາງ; ແທ້ຈິງແລ້ວ, ພວກເຮົາໄດ້ສິດສອນພວກເຂົາຢູ່ເທິງເນີນພູ ແລະ ໄດ້ເຂົ້າໄປໃນພຣະວິຫານ ແລະ ທຳມະສາລາເພື່ອສິດສອນພວກເຂົາ; ແລະ ພວກເຮົາໄດ້ຖືກຂັບໄລ່ໜີ ແລະ ໄດ້ຖືກເຍາະເຍ້ຍຫົວຂວັນ, ແລະ ໄດ້ຖືກຖົ່ມນ້ຳລາຍໃສ່, ແລະ ໄດ້ຖືກຕົບໜ້າ, ແລະ ໄດ້ຖືກແກວ່ງກ້ອນຫີນໃສ່, ແລະ ໄດ້ຖືກຈັບ, ແລະ ໄດ້ຖືກມັດດ້ວຍເຊືອກໝັ້ນ, ແລະ ໄດ້ຖືກເອົາໄປເຂົ້າຄຸກ, ແຕ່ໂດຍອຳນາດ ແລະ ຄວາມສະຫລຽວສະຫລາດຂອງພຣະເຈົ້າ ພວກເຮົາຈຶ່ງໄດ້ຮັບການປົດປ່ອຍ.

And we have entered into their houses and taught them, and we have taught them in their streets; yea, and we have taught them upon their hills; and we have also entered into their temples and their synagogues and taught them; and we have been cast out, and mocked, and spit upon, and smote upon our cheeks; and we have been stoned, and taken and bound with strong cords, and cast into prison; and through the power and wisdom of God we have been delivered again.

๘๘ ພວກເຮົາໄດ້ຮັບຄວາມທຸກນາໆປະການ, ແລະ ທັງໝົດນີ້ ເພື່ອບາງທີພວກເຮົາອາດຈະໄດ້ເປັນຫົນທາງຊ່ວຍເຫລືອ ຈິດວິນຍານດວງໜຶ່ງໃຫ້ລອດ; ແລະ ພວກເຮົາຄິດວ່າພວກເຮົາ ຈະເຕັມໄປດ້ວຍ ຄວາມສຸກ ຖ້າຫາກພວກເຮົາສາມາດເປັນ ຫົນທາງຊ່ວຍເຫລືອຜູ້ໃດຜູ້ໜຶ່ງໃຫ້ລອດໄດ້.

And we have suffered all manner of afflictions, and all this, that perhaps we might be the means of saving some soul; and we supposed that our joy would be full if perhaps we could be the means of saving some.

๘๙ ບັດນີ້ຈົ່ງເບິ່ງ, ພວກເຮົາສາມາດເບິ່ງໄປ ແລະ ເຫັນຜົນຂອງ ວຽກງານຂອງພວກເຮົາໄດ້; ແລະ ມັນມີໜ້ອຍບໍ່? ຂ້າພະເຈົ້າ ກ່າວກັບພວກທ່ານວ່າ ບໍ່ເລີຍ, ມັນມີ ຫລາຍ; ແທ້ຈິງແລ້ວ, ແລະ ພວກເຮົາສາມາດເປັນພະຍານໄດ້ເຖິງຄວາມຈິງໃຈຂອງ ພວກເຂົາ, ຍ້ອນວ່າຄວາມຮັກຂອງພວກເຂົາທີ່ມີຕໍ່ພີ່ນ້ອງຂອງ ພວກເຂົາ ແລະ ຄວາມຮັກທີ່ມີຕໍ່ພວກເຮົານຳອີກ.

Now behold, we can look forth and see the fruits of our labors; and are they few? I say unto you, Nay, they are many; yea, and we can witness of their sincerity, because of their love towards their brethren and also towards us.

๙๐ ເພາະຈົ່ງເບິ່ງ, ພວກເຂົາຍອມ ເສຍສະລະຊີວິດຕົວເອງ ແທນ ທີ່ຈະເອົາຊີວິດຂອງສັດຕູຂອງພວກເຂົາ; ແລະ ພວກເຂົາໄດ້ ຝັງ ອາວຸດແຫ່ງສົງຄາມຂອງພວກເຂົາໄວ້ເລິກໃນດິນ, ຍ້ອນວ່າ ພວກເຂົາມີຄວາມຮັກຕໍ່ພີ່ນ້ອງຂອງພວກເຂົາ.

For behold, they had rather sacrifice their lives than even to take the life of their enemy; and they have buried their weapons of war deep in the earth, because of their love towards their brethren.

๙๑ ແລະ ບັດນີ້ຈົ່ງເບິ່ງ ຂ້າພະເຈົ້າເວົ້າກັບພວກທ່ານວ່າ ມັນເຄີຍ ມີຄວາມຮັກອັນຍິ່ງໃຫຍ່ແບບນີ້ຢູ່ໃນແຜ່ນດິນທົ່ວໄປບໍ? ຈົ່ງ ເບິ່ງ, ຂ້າພະເຈົ້າເວົ້າກັບພວກທ່ານວ່າ, ບໍ່ມີເລີຍ, ທັງໆທີ່ຢູ່ໃນ ບັນດາຊາວນີໄຟ ກໍບໍ່ເຄີຍມີເລີຍ.

And now behold I say unto you, has there been so great love in all the land? Behold, I say unto you, Nay, there has not, even among the Nephites.

๙๒ ເພາະຈົ່ງເບິ່ງ, ຊາວນີໄຟຈະຈັບອາວຸດຂຶ້ນຕໍ່ສູ້ພີ່ນ້ອງຂອງ ພວກເຂົາ; ພວກເຂົາຈະບໍ່ຍອມໃຫ້ຕົນເອງຖືກຂ້າຕາຍເລີຍ. ແຕ່ ຈົ່ງເບິ່ງ, ມີຫລາຍຄົນໃນພວກນີ້ທີ່ຍອມສະລະຊີວິດຂອງຕົນ ແລະ ພວກເຮົາຮູ້ວ່າ ພວກເຂົາໄປເຝົ້າພຣະເຈົ້າຂອງພວກເຂົາ ແລ້ວ, ເພາະຄວາມຮັກຂອງພວກເຂົາ ແລະ ຄວາມກຽດຊັງບາບ ຂອງພວກເຂົາ.

For behold, they would take up arms against their brethren; they would not suffer themselves to be slain. But behold how many of these have laid down their lives; and we know that they have gone to their God, because of their love and of their hatred to sin.

ນ້ຍ ບັດນີ້ພວກເຮົາມີເຫດຜົນທີ່ຈະປິຕິຍິນດີບໍ? ແທ້ຈິງແລ້ວ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ນັບແຕ່ການເລີ່ມຕົ້ນຂອງ ໂລກ ບໍ່ເຄີຍມີຜູ້ໃດຈະມີເຫດຜົນຫລາຍແບບນີ້ທີ່ຈະປິຕິຍິນດີຄືກັນກັບພວກເຮົາ; ແທ້ຈິງແລ້ວ, ຄວາມຜາສຸກຂອງຂ້າພະເຈົ້າ ຖືກພາໄປຈົນເຖິງການອວດອ້າງພຣະເຈົ້າຂອງຂ້າພະເຈົ້າ; ເພາະພຣະອົງມີ ອຳນາດທຸກຢ່າງ, ມີຄວາມສະຫລຽວ ສະຫລາດທຸກຢ່າງ, ແລະ ມີ ຄວາມເຂົ້າໃຈທຸກຢ່າງ, ແລະ ພຣະອົງເຂົ້າໃຈ ແລະ ມີ ຄວາມເມດຕາຈົນເຖິງຂັ້ນທີ່ມອບຄວາມ ລອດໃຫ້ແກ່ຜູ້ທີ່ກັບໃຈ ແລະ ເຊື່ອໃນພຣະນາມຂອງພຣະອົງ.

Now have we not reason to rejoice? Yea, I say unto you, there never were men that had so great reason to rejoice as we, since the world began; yea, and my joy is carried away, even unto boasting in my God; for he has all power, all wisdom, and all understanding; he comprehendeth all things, and he is a merciful Being, even unto salvation, to those who will repent and believe on his name.

ນ້ຝ ບັດນີ້ຖ້າຫາກສິ່ງນີ້ເປັນການອວດອ້າງແລ້ວ, ຂ້າພະເຈົ້າຈະ ອວດອ້າງມັນ; ເພາະວ່ານີ້ຄືຊີວິດ ແລະ ຄວາມສະຫว่າງຂອງ ຂ້າພະເຈົ້າ, ຄວາມຜາສຸກ ແລະ ຄວາມລອດຂອງຂ້າພະເຈົ້າ, ແລະ ການໄຖ່ຂອງຂ້າພະເຈົ້າອອກຈາກຄວາມຈິບຫາຍອັນເປັນ ນິດ. ແທ້ຈິງແລ້ວ, ຂໍພຣະນາມຂອງພຣະເຈົ້າຂອງຂ້າພະເຈົ້າ ຈົ່ງພຣະກະເສີມສຳລານເຖີດ, ພຣະຜູ້ທີ່ເປັນຫ່ວງຜູ້ຄົນພວກ ນີ້, ຜູ້ທີ່ເປັນ ກິ່ງງ່າຂອງຕົ້ນອິດສະຣາເອນ, ຊຶ່ງຫລົງຈາກຕົ້ນ ຂອງມັນເຂົ້າໄປໃນແຜ່ນດິນໃໝ່; ແທ້ຈິງແລ້ວ, ຂ້າພະເຈົ້າເວົ້າ ວ່າ, ຂໍພຣະນາມຂອງພຣະເຈົ້າຈົ່ງພຣະກະເສີມສຳລານເຖີດ, ພຣະອົງເປັນຫ່ວງພວກເຮົາ, ຄົນທີ່ຊັດເຊພະເນຈອນໄປໃນ ແຜ່ນດິນໃໝ່.

Now if this is boasting, even so will I boast; for this is my life and my light, my joy and my salvation, and my redemption from everlasting wo. Yea, blessed is the name of my God, who has been mindful of this people, who are a branch of the tree of Israel, and has been lost from its body in a strange land; yea, I say, blessed be the name of my God, who has been mindful of us, wanderers in a strange land.

ນ້ກ ບັດນີ້ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ ພວກເຮົາເຫັນວ່າ ພຣະເຈົ້າເປັນຫ່ວງນຳ ທຸກຄົນ ບໍ່ວ່າພວກເຂົາຈະຢູ່ໃນແຜ່ນດິນ ໃດກໍຕາມ; ແທ້ຈິງແລ້ວ, ພຣະອົງນັບຜູ້ຄົນຂອງພຣະອົງ ແລະ ອຸທອນກ້ອນເລືອດແຫ່ງພຣະເມດຕາປານີຂອງພຣະອົງທີ່ມີຢູ່ ເທິງແຜ່ນດິນໂລກທັງໝົດ. ບັດນີ້ ນີ້ຄືຄວາມຜາສຸກຂອງ ຂ້າພະເຈົ້າ, ແລະ ການຖວາຍຂອບພຣະໄທອັນລົ້ນເຫລືອຂອງ ຂ້າພະເຈົ້າ; ແທ້ຈິງແລ້ວ, ແລະ ຂ້າພະເຈົ້າຈະຖວາຍການຂອບ ພຣະໄທແດ່ພຣະເຈົ້າຂອງຂ້າພະເຈົ້າຕະຫລອດໄປ. ອາແມນ.

Now my brethren, we see that God is mindful of every people, whatsoever land they may be in; yea, he numbereth his people, and his bowels of mercy are over all the earth. Now this is my joy, and my great thanksgiving; yea, and I will give thanks unto my God forever. Amen.

ແອວມາ ๘๗

๑ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອຊາວເລມັນຊຶ່ງໄດ້ໄປກໍ່ສົງຄາມກັບຊາວນີໄຟ ໄດ້ຄົ້ນລົນມາຫລາຍເທື່ອແລ້ວທີ່ຈະທຳລາຍຊາວນີໄຟ, ຈຶ່ງເຫັນວ່າມັນບໍ່ມີປະໂຫຍດທີ່ຈະພະຍາຍາມທຳລາຍຊຶ່ງກັນແລະກັນ, ພວກເຂົາຈຶ່ງໄດ້ກັບຄືນໄປຫາແຜ່ນດິນນີໄຟ.

๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວອາມາລະໄຄມີຄວາມຄຽດແຄ້ນຫລາຍທີ່ສຸດເພາະການເສຍໄຊຂອງພວກເຂົາ. ແລະ ເມື່ອເຫັນວ່າພວກເຂົາຫາທາງແກ້ແຄ້ນຊາວນີໄຟບໍ່ໄດ້, ພວກເຂົາຈຶ່ງເລີ່ມຍຸຍົງຜູ້ຄົນໃຫ້ຄຽດແຄ້ນໃຫ້ຜູ້ຄົນຂອງ ອານໄທ-ນີໄຟ-ລີໄຮ, ທີ່ເປັນ ພີ່ນ້ອງຂອງພວກເຂົາເອງ; ສະນັ້ນ ພວກເຂົາຈຶ່ງເລີ່ມທຳລາຍພວກເຂົາ.

๓ ບັດນີ້ຜູ້ຄົນພວກນີ້ບໍ່ຍອມຈັບອາວຸດ ອີກ, ແຕ່ພວກເຂົາຍອມຕົວໃຫ້ຖືກຂ້າຕາຍຕາມຄວາມປະສົງຂອງສັດຕູຂອງພວກເຂົາ.

๔ ບັດນີ້ເມື່ອອຳໂມນ ແລະ ພີ່ນ້ອງຂອງລາວເຫັນການທຳລາຍໃນບັນດາຜູ້ຄົນທີ່ລາວຮັກຫລາຍທີ່ສຸດ, ແລະ ໃນບັນດາຜູ້ຄົນທີ່ຮັກເຂົາເຈົ້າ—ເພາະວ່າເຂົາເຈົ້າຖືກນັບຖືว่าເປັນເທລ່ຳທູດທີ່ໄດ້ຖືກສົ່ງມາຈາກພຣະເຈົ້າເພື່ອຊ່ວຍເຫລືອພວກເຂົາໃຫ້ລອດຈາກຄວາມພິນາດອັນເປັນນິດ—ສະນັ້ນ, ເມື່ອອຳໂມນ ແລະ ພີ່ນ້ອງຂອງລາວເຫັນການທຳລາຍອັນຍິ່ງໃຫຍ່ນີ້ແລ້ວ, ເຂົາເຈົ້າກໍເກີດຄວາມເມດຕາສົງສານຂຶ້ນມາ, ແລະ ເຂົາເຈົ້າໄດ້ ກ່າວກັບກະສັດว่า:

๕ ຂໍໃຫ້ພວກຂ້ານ້ອຍຮວບຮວມເອົາຜູ້ຄົນພວກນີ້ຂອງພຣະຜູ້ເປັນເຈົ້າ, ແລະ ໃຫ້ພວກເຮົາລົງໄປຫາແຜ່ນດິນເຊຣາເຮັມລາໄປຫາຊາວນີໄຟພີ່ນ້ອງຂອງພວກເຮົາເຖີດ, ແລະ ໜີຈາກກຳມືຂອງສັດຕູຂອງພວກເຮົາເພື່ອພວກເຮົາຈະບໍ່ຖືກທຳລາຍ.

๖ ແຕ່ກະສັດໄດ້ເວົ້າກັບເຂົາເຈົ້າว่า: ຈົ່ງເບິ່ງ, ຊາວນີໄຟຈະທຳລາຍພວກເຮົາ, ເພາະການຄາດຕະກຳ ແລະ ບາບອັນຫລວງຫລາຍທີ່ພວກເຮົາໄດ້ກະທຳຕໍ່ພວກເຂົາ.

๗ ແລະ ອຳໂມນເວົ້າว่า: ຂ້ານ້ອຍຈະໄປທູນຖາມພຣະຜູ້ເປັນເຈົ້າ, ແລະ ຖ້າຫາກພຣະອົງບອກພວກເຮົາว่า ໃຫ້ລົງໄປຫາພີ່ນ້ອງຂອງພວກເຮົາ, ແລ້ວທ່ານຈະໄປບໍ່?

๘ ແລະ ກະສັດໄດ້ກ່າວກັບລາວว่า: ແທ້ຈິງແລ້ວ, ຖ້າຫາກພຣະຜູ້ເປັນເຈົ້າບອກໃຫ້ພວກເຮົາໄປ, ພວກເຮົາຈະລົງໄປຫາພີ່ນ້ອງຂອງພວກເຮົາ, ແລະ ພວກເຮົາຈະເປັນຂ້ອຍຂ້າພວກເຂົາໄປຈົນກว่าພວກເຮົາຈະໃຊ້ແທນຄືນໃຫ້ພວກເຂົາໃນການຄາດຕະກຳ ແລະ ບາບຢ່າງຫລວງຫລາຍ ຊຶ່ງພວກເຮົາໄດ້ກະທຳໄວ້ກັບພວກເຂົາ.

Alma 27

Now it came to pass that when those Lamanites who had gone to war against the Nephites had found, after their many struggles to destroy them, that it was in vain to seek their destruction, they returned again to the land of Nephi.

And it came to pass that the Amalekites, because of their loss, were exceedingly angry. And when they saw that they could not seek revenge from the Nephites, they began to stir up the people in anger against their brethren, the people of Anti-Nephi-Lehi; therefore they began again to destroy them.

Now this people again refused to take their arms, and they suffered themselves to be slain according to the desires of their enemies.

Now when Ammon and his brethren saw this work of destruction among those whom they so dearly beloved, and among those who had so dearly beloved them—for they were treated as though they were angels sent from God to save them from everlasting destruction—therefore, when Ammon and his brethren saw this great work of destruction, they were moved with compassion, and they said unto the king:

Let us gather together this people of the Lord, and let us go down to the land of Zarahemla to our brethren the Nephites, and flee out of the hands of our enemies, that we be not destroyed.

But the king said unto them: Behold, the Nephites will destroy us, because of the many murders and sins we have committed against them.

And Ammon said: I will go and inquire of the Lord, and if he say unto us, go down unto our brethren, will ye go?

And the king said unto him: Yea, if the Lord saith unto us go, we will go down unto our brethren, and we will be their slaves until we repair unto them the many murders and sins which we have committed against them.

ຈ ແຕ່ອໍາໂມນໄດ້ເວົ້າກັບເພີ່ນວ່າ: ມັນເປັນການຜິດກົດໝາຍ ຂອງພີ່ນ້ອງຂອງພວກເຮົາ, ຊຶ່ງບິດາຂອງຂ້ານ້ອຍໄດ້ ສະຖາປະນາຂຶ້ນຄື, ບໍ່ໃຫ້ມີ ຂ້ອຍຂ້າໃນບັນດາພວກເຂົາ; ສະນັ້ນ ຈົ່ງໃຫ້ພວກເຮົາລົງໄປ ແລະ ໄວ້ວາງใจในความเมตตาของ ພີ່ນ້ອງຂອງພວກເຮົາເຖີດ.

But Ammon said unto him: It is against the law of our brethren, which was established by my father, that there should be any slaves among them; therefore let us go down and rely upon the mercies of our brethren.

ຈ ແຕ່ກະສັດໄດ້ກ່າວກັບລາວວ່າ: ຈົ່ງທູນຖາມພຣະຜູ້ເປັນເຈົ້າ ກ່ອນ, ແລະ ຖ້າຫາກພຣະອົງບອກໃຫ້ພວກເຮົາໄປ, ພວກເຮົາ ກໍຈະໄປ; ຖ້າບໍ່ດັ່ງນັ້ນ ພວກເຮົາກໍຈະຕາຍຢູ່ໃນແຜ່ນດິນນີ້.

But the king said unto him: Inquire of the Lord, and if he saith unto us go, we will go; otherwise we will perish in the land.

ຈ ແລະ ເຫດການໄດ້ບັງເກີດຂຶ້ນຄື ອໍາໂມນໄດ້ທູນຖາມພຣະຜູ້ ເປັນເຈົ້າ, ແລະ ພຣະຜູ້ເປັນເຈົ້າໄດ້ກ່າວກັບລາວວ່າ:

And it came to pass that Ammon went and inquired of the Lord, and the Lord said unto him:

ຈ ຈົ່ງພາຜູ້ຄົນພວກນີ້ອອກຈາກແຜ່ນດິນນີ້ໄປ ເພື່ອພວກເຂົາ ຈະບໍ່ຕາຍ; ເພາະວ່າຊາຕານມີອໍານາດອັນໃຫຍ່ຫລວງທີ່ເໝືອ ใจของชาวอามาละไถ, ผู้ยุยงชาวเลมันให้ถกเถียงต่อ ພີ່ນ້ອງຂອງຕົນ ແລະ ໃຫ້ຂ້າພວກເຂົາ; ສະນັ້ນ ພວກເຈົ້າຈົ່ງໜີ ອອກຈາກແຜ່ນດິນນີ້ໄປ; ແລະ ຜູ້ຄົນພວກນີ້ຈະໄດ້ຮັບພອນ, ເພາະເຮົາຈະຮັກສາພວກເຂົາໄວ້.

Get this people out of this land, that they perish not; for Satan has great hold on the hearts of the Amalekites, who do stir up the Lamanites to anger against their brethren to slay them; therefore get thee out of this land; and blessed are this people in this generation, for I will preserve them.

ຈ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ອໍາໂມນໄດ້ໄປບອກກະ ສັດທຸກໆຂໍ້ຄວາມທີ່ພຣະຜູ້ເປັນເຈົ້າໄດ້ກ່າວກັບລາວ.

And now it came to pass that Ammon went and told the king all the words which the Lord had said unto him.

ຈ ແລະ ພວກເຂົາໄດ້ເຕົ້າໂຮມຜູ້ຄົນຂອງພວກເຂົາທັງໝົດ ເຂົ້າກັນ, ແທ້ຈິງແລ້ວ, ແມ່ນຜູ້ຄົນທັງໝົດຂອງພຣະຜູ້ເປັນເຈົ້າ, ແລະ ໄດ້ເຕົ້າໂຮມຝູງສັດລ້ຽງ ແລະ ສັດໃຊ້ແຮງງານທັງໝົດ ຂອງຕົນ, ແລະ ອອກຈາກແຜ່ນດິນ ແລະ ເດີນທາງເຂົ້າໄປໃນ ຖິ່ນແຫ້ງແລ້ງກັນດານ ຊຶ່ງເປັນບ່ອນທີ່ແຍກແຜ່ນດິນນີໄຟ ອອກຈາກແຜ່ນດິນເຊຣາເຮັມລາ, ແລະ ຂ້າມມາໃກ້ຊາຍແດນ ຂອງແຜ່ນດິນ.

And they gathered together all their people, yea, all the people of the Lord, and did gather together all their flocks and herds, and departed out of the land, and came into the wilderness which divided the land of Nephi from the land of Zarahemla, and came over near the borders of the land.

ຈ ແລະ ເຫດການໄດ້ບັງເກີດຂຶ້ນຄື ອໍາໂມນໄດ້ເວົ້າກັບພວກເຂົາ ວ່າ: ຈົ່ງເບິ່ງ, ຂ້າພະເຈົ້າພ້ອມດ້ວຍພີ່ນ້ອງຂອງຂ້າພະເຈົ້າຈະ ເຂົ້າໄປໃນແຜ່ນດິນເຊຣາເຮັມລາ, ແລະ ໃຫ້ພວກທ່ານລໍຖ້າ ພວກເຮົາຢູ່ບ່ອນນີ້; ຈົນກວ່າວ່າພວກເຮົາຈະກັບມາ ເພາະວ່າ ພວກເຮົາຈະລອງใจพี่น้องของพวกเราว่า พวกเขาจะให้ ພວກເຮົາເຂົ້າໄປຢູ່ໃນແຜ່ນດິນຂອງພວກເຂົາຫລືບໍ່.

And it came to pass that Ammon said unto them: Behold, I and my brethren will go forth into the land of Zarahemla, and ye shall remain here until we return; and we will try the hearts of our brethren, whether they will that ye shall come into their land.

ຈ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນຂະນະທີ່ອໍາໂມນກໍາລັງ ເຂົ້າໄປໃນແຜ່ນດິນ, ລາວກັບພີ່ນ້ອງຂອງລາວໄດ້ພົບກັບແອວ ມາໃນ ບ່ອນຊຶ່ງໄດ້ເວົ້າມາແລ້ວ; ແລະ ຈົ່ງເບິ່ງ, ມັນເປັນການ ພົບພໍ້ຢ່າງໜ້າປີຕິຍິນດີ.

And it came to pass that as Ammon was going forth into the land, that he and his brethren met Alma, over in the place of which has been spoken; and behold, this was a joyful meeting.

ຈ ບັດນີ້ ຄວາມສຸກຂອງອໍາໂມນນັ້ນຍິ່ງໃຫຍ່ທີ່ສຸດ ເຖິງກັບລາວ ເຕັມໄປດ້ວຍຄວາມສຸກ; ແທ້ຈິງແລ້ວ, ລາວຖືກກືນເຂົ້າໄປໃນ ຄວາມສຸກຂອງພຣະເຈົ້າຂອງລາວ, ຈົນເຮັດໃຫ້ກໍາລັງຂອງລາວ ໝົດໄປ; ແລະ ລາວໄດ້ລົ້ມລົງຢູ່ກັບພື້ນດິນ ອີກ.

Now the joy of Ammon was so great even that he was full; yea, he was swallowed up in the joy of his God, even to the exhausting of his strength; and he fell again to the earth.

໑໘ ບັດນີ້ມັນບໍ່ແມ່ນຄວາມສຸກແທ້ໆບໍ? ຈົ່ງເບິ່ງ, ນີ້ເປັນຄວາມ
ສຸກຊຶ່ງບໍ່ມີຜູ້ໃດໄດ້ຮັບນອກຈາກຜູ້ສະແຫວງຫາຄວາມສຸກ
ດ້ວຍການສຳນຶກຜິດ ແລະ ການຖ່ອມຕົວຢ່າງແທ້ຈິງເທົ່ານັ້ນ.

Now was not this exceeding joy? Behold, this is joy which none receiveth save it be the truly penitent and humble seeker of happiness.

໑໙ ບັດນີ້ຄວາມປິຕິຍິນດີຂອງແອວມາໃນການພົບພໍ້ກັບພີ່ນ້ອງ
ຂອງເພິ່ນນັ້ນຍິ່ງໃຫຍ່ແທ້ໆ, ແລະ ອາໂຣນ, ອອມເນີ, ແລະ ຮິມ
ໄນ ກໍມີຄວາມປິຕິຍິນດີຄືກັນ; ແຕ່ຈົ່ງເບິ່ງ ຄວາມປິຕິຍິນດີຂອງ
ຄົນເຫລົ່ານັ້ນບໍ່ໄດ້ເກີນກຳລັງຂອງພວກເຂົາເລີຍ.

Now the joy of Alma in meeting his brethren was truly great, and also the joy of Aaron, of Omner, and Himni; but behold their joy was not that to exceed their strength.

໒໐ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ແອວມາໄດ້ພາພີ່ນ້ອງ
ຂອງເພິ່ນກັບຄືນໄປຫາແຜ່ນດິນເຊຣາເຮັມລາ; ແມ່ນແຕ່ໄປຫາ
ເຮືອນຂອງເພິ່ນເອງ. ແລະ ເຂົາເຈົ້າໄດ້ບອກ ຫົວໜ້າຜູ້ຕັດສິນ
ເຖິງເລື່ອງທັງໝົດທີ່ໄດ້ເກີດຂຶ້ນກັບເຂົາເຈົ້າໃນແຜ່ນດິນນີໄຟ,
ໃນບັນດາຊາວເລມັນພີ່ນ້ອງຂອງເຂົາເຈົ້າ.

And now it came to pass that Alma conducted his brethren back to the land of Zarahemla; even to his own house. And they went and told the chief judge all the things that had happened unto them in the land of Nephi, among their brethren, the Lamanites.

໒໑ ແລະ ເຫດການໄດ້ບັງເກີດຂຶ້ນຄື ຫົວໜ້າຜູ້ຕັດສິນໄດ້ສົ່ງ
ຂ່າວສານໄປທົ່ວແຜ່ນດິນໂດຍປາດຖະໜາຢາກຮູ້ຈັກສຽງຂອງ
ຜູ້ຄົນກ່ຽວກັບການຮັບເອົາພີ່ນ້ອງຂອງພວກເຂົາ, ຊຶ່ງເປັນ
ຜູ້ຄົນຂອງອານໄທ-ນີໄຟ-ລີໄຮ.

And it came to pass that the chief judge sent a proclamation throughout all the land, desiring the voice of the people concerning the admitting their brethren, who were the people of Anti-Nephi-Lehi.

໒໒ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນໃຫ້ສຽງວ່າ: ຈົ່ງເບິ່ງ,
ພວກເຮົາຈະຍົກແຜ່ນດິນເຈີຊອນໃຫ້ພວກເຂົາ, ຊຶ່ງມັນຢູ່ທາງ
ຕາເວັນອອກໃກ້ກັບທະເລ, ຊຶ່ງຕິດຕໍ່ກັບແຜ່ນດິນອຸດົມສົມບູນ
ຊຶ່ງຢູ່ທາງໃຕ້ແຜ່ນດິນອຸດົມສົມບູນ; ແລະ ແຜ່ນດິນເຈີຊອນນີ້
ເປັນແຜ່ນດິນທີ່ພວກເຮົາຈະມອບໃຫ້ແກ່ພີ່ນ້ອງຂອງພວກເຮົາ
ເປັນມູນມໍລະດົກ.

And it came to pass that the voice of the people came, saying: Behold, we will give up the land of Jershon, which is on the east by the sea, which joins the land Bountiful, which is on the south of the land Bountiful; and this land Jershon is the land which we will give unto our brethren for an inheritance.

໒໓ ແລະ ຈົ່ງເບິ່ງ, ພວກເຮົາຈະຕັ້ງກອງທັບຂອງພວກເຮົາໄວ້
ລະຫວ່າງແຜ່ນດິນເຈີຊອນ ແລະ ແຜ່ນດິນນີໄຟ, ເພື່ອພວກເຮົາ
ຈະໄດ້ປົກປັກຮັກສາພີ່ນ້ອງຂອງພວກເຮົາໃນແຜ່ນດິນເຈີຊອນ;
ແລະ ພວກເຮົາເຮັດສິ່ງນີ້ເພື່ອພີ່ນ້ອງຂອງພວກເຮົາ, ເນື່ອງ
ດ້ວຍວ່າຄວາມຢ້ານກົວຂອງພວກເຂົາທີ່ຈະຈັບອາວຸດຂຶ້ນຕໍ່ສູ້
ກັບພີ່ນ້ອງຂອງພວກເຂົາ, ໂດຍຢ້ານວ່າພວກເຂົາຈະເຮັດບາບ
ອີກ, ແລະ ຄວາມຢ້ານກົວອັນໃຫຍ່ຫລວງນີ້ເກີດຂຶ້ນເພາະການ
ກັບໃຈອັນປວດລ້າວຂອງພວກເຂົາ, ເນື່ອງຈາກຄາດຕະກຳຢ່າງ
ຫລວງຫລາຍ ແລະ ຄວາມຊົ່ວຮ້າຍອັນເປັນຕາຢ້ານຂອງພວກ
ເຂົາ.

And behold, we will set our armies between the land Jershon and the land Nephi, that we may protect our brethren in the land Jershon; and this we do for our brethren, on account of their fear to take up arms against their brethren lest they should commit sin; and this their great fear came because of their sore repentance which they had, on account of their many murders and their awful wickedness.

໒໔ ແລະ ບັດນີ້ຈົ່ງເບິ່ງ, ພວກເຮົາເຮັດສິ່ງນີ້ໄປເພື່ອພີ່ນ້ອງຂອງ
ພວກເຮົາ, ເພື່ອພວກເຂົາຈະໄດ້ແຜ່ນດິນເຈີຊອນເປັນມູນ
ມໍລະດົກ; ແລະ ພວກເຮົາຈະຄຸ້ມຄອງພວກເຂົາໃຫ້ພົ້ນຈາກ
ສັດຕູຂອງພວກເຂົາ, ດ້ວຍກຳລັງຂອງກອງທັບຂອງພວກເຮົາ,
ໂດຍມີເງື່ອນໄຂວ່າ ພວກເຂົາຈະຕ້ອງມອບເຂົ້າຂອງສ່ວນໜຶ່ງ
ຂອງພວກເຂົາໃຫ້ແກ່ພວກເຮົາເພື່ອຈະໄດ້ບຳລຸງລ້ຽງກອງທັບ.

And now behold, this will we do unto our brethren, that they may inherit the land Jershon; and we will guard them from their enemies with our armies, on condition that they will give us a portion of their substance to assist us that we may maintain our armies.

ຕ

ບັດນີ້, ເຫດການໄດ້ບັງເກີດຂຶ້ນຄື ເມື່ອອໍາໂມນໄດ້ຍິນເລື່ອງ ເຫລົ່ານີ້ແລ້ວ, ລາວກໍໄດ້ກັບຄືນໄປຫາຜູ້ຄົນຂອງອານໄທ-ນີໄຟ -ລີໄຮ, ແລະ ແອວມາກໍໄປກັບລາວຄືກັນ, ແລະ ໄດ້ເຂົ້າໄປໃນຖິ່ນ ແຫ້ງແລ້ງກັນດານເພື່ອໄປຫາບ່ອນທີ່ພວກເຂົາພັກເຊົາຢູ່, ແລະ ໄດ້ແຈ້ງເລື່ອງລາວທັງໝົດແກ່ພວກເຂົາ. ແລະ ແອວມາ ໄດ້ເລົ່າໃຫ້ພວກເຂົາຟັງເຖິງເລື່ອງ ການປ່ຽນໃຈເຫລື້ອມໃສ ຂອງເພິ່ນ, ພ້ອມທັງເລື່ອງລາວຂອງອໍາໂມນ, ແລະ ອາໂຣນ, ແລະ ພີ່ນ້ອງຂອງລາວນໍາອີກ.

ຕ

ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນໄດ້ເຮັດໃຫ້ພວກເຂົາມີ ຄວາມສຸກຫລາຍ. ແລະ ພວກເຂົາໄດ້ລົງໄປຫາແຜ່ນດິນເຈີຊອນ ແລະ ເຂົ້າເປັນເຈົ້າຂອງແຜ່ນດິນເຈີຊອນ; ແລະ ຊາວນີໄຟເອີ້ນ ພວກເຂົາວ່າ ຜູ້ຄົນຂອງອໍາໂມນ; ສະນັ້ນພວກເຂົາຈຶ່ງແຕກຕ່າງ ອອກໄປຕາມຊື່ນັ້ນນັບແຕ່ເວລານັ້ນມາ.

ຕ

ແລະ ພວກເຂົາໄດ້ຢູ່ຮ່ວມກັບບັນດາຜູ້ຄົນຂອງນີໄຟ, ແລະ ຖືກນັບເຂົ້າຢູ່ໃນບັນດາຜູ້ຄົນຊຶ່ງເປັນຂອງສາດສະໜາຈັກຂອງ ພຣະເຈົ້ານໍາອີກ. ແລະ ພວກເຂົາດີເດັ່ນຂຶ້ນ ຍ້ອນວ່າຄວາມ ກະຕືລືລົ້ນຂອງພວກເຂົາທີ່ມີຕໍ່ພຣະເຈົ້າ ແລະ ຕໍ່ມະນຸດຊາດ; ເພາະພວກເຂົາ ຊື່ສັດ ແລະ ຊື່ຕົງຢ່າງສົມບູນ ໃນທຸກສິ່ງ; ແລະ ພວກເຂົາມີສັດທາຢ່າງ ໝັ້ນຄົງໃນພຣະຄຣິດຈົນເຖິງວັນຕາຍ.

ຕ

ແລະ ພວກເຂົາໄດ້ຫລຽວເບິ່ງການນອງເລືອດຂອງພີ່ນ້ອງ ຂອງຕົນດ້ວຍຄວາມກຽດຊັງທີ່ສຸດ; ແລະ ພວກເຂົາຈະບໍ່ຍອມ ຈັບອາວຸດຂຶ້ນມາຕໍ່ສູ້ກັບພີ່ນ້ອງຂອງພວກເຂົາອີກເລີຍ; ແລະ ພວກເຂົາບໍ່ເຄີຍຫລຽວເບິ່ງຄວາມຕາຍດ້ວຍຄວາມສະທ້ານ ຢ້ານກົວ ບໍ່ວ່າຈະຫລາຍໜ້ອຍພຽງໃດກໍຕາມ, ເພາະຄວາມ ຫວັງ ແລະ ຈຸດທີ່ໝັ້ນຂອງພວກເຂົາມີຢູ່ທີ່ພຣະຄຣິດ ແລະ ການຟື້ນຄືນຊີວິດ; ສະນັ້ນ, ຄວາມຕາຍຈຶ່ງຖືກກືນໄປຈາກພວກ ເຂົາໂດຍເອົາໄຊຊະນະຂອງພຣະຄຣິດເໜືອມັນ.

ສ

ສະນັ້ນ, ພວກເຂົາຈຶ່ງຍອມຮັບ ຄວາມຕາຍໃນວິທີທີ່ທຸກ ທໍລະມານ ແລະ ເຈັບປວດທີ່ສຸດ ຊຶ່ງພີ່ນ້ອງຂອງພວກເຂົາໄດ້ ກະທໍາກັບພວກເຂົາ, ແທນທີ່ພວກເຂົາຈະຈັບດາບຂຶ້ນມາຟັນ ພວກເຂົາ.

ມ

ແລະ ດັ່ງນັ້ນ ພວກເຂົາຈຶ່ງເປັນຜູ້ຄົນທີ່ກະຕືລືລົ້ນ ແລະ ເປັນ ທີ່ຮັກຫອມ, ແລະ ເປັນຜູ້ຄົນທີ່ໂປດປານຫລາຍທີ່ສຸດຂອງ ພຣະຜູ້ເປັນເຈົ້າ.

Now, it came to pass that when Ammon had heard this, he returned to the people of Anti-Nephi-Lehi, and also Alma with him, into the wilderness, where they had pitched their tents, and made known unto them all these things. And Alma also related unto them his conversion, with Ammon and Aaron, and his brethren.

And it came to pass that it did cause great joy among them. And they went down into the land of Jershon, and took possession of the land of Jershon; and they were called by the Nephites the people of Ammon; therefore they were distinguished by that name ever after.

And they were among the people of Nephi, and also numbered among the people who were of the church of God. And they were also distinguished for their zeal towards God, and also towards men; for they were perfectly honest and upright in all things; and they were firm in the faith of Christ, even unto the end.

And they did look upon shedding the blood of their brethren with the greatest abhorrence; and they never could be prevailed upon to take up arms against their brethren; and they never did look upon death with any degree of terror, for their hope and views of Christ and the resurrection; therefore, death was swallowed up to them by the victory of Christ over it.

Therefore, they would suffer death in the most aggravating and distressing manner which could be inflicted by their brethren, before they would take the sword or cimeter to smite them.

And thus they were a zealous and beloved people, a highly favored people of the Lord.

ແອວມາ ๘๒

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກຜູ້ຄົນຂອງ ອຳໂມນໄດ້ຕັ້ງຖິ່ນຖານໃນແຜ່ນດິນ ເจີຊອນແລ້ວ, ແລະ ສາດສະໜາຈັກໄດ້ຖືກສະຖາປະນາຂຶ້ນໃນແຜ່ນດິນເจີຊອນນຳ ອີກ, ແລະ ກອງທັບຂອງຊາວນີໄຟໄດ້ມາຕັ້ງຢູ່ໂດຍອ້ອມຮອບ ແຜ່ນດິນເจີຊອນ, ແທ້ຈິງແລ້ວ, ຢູ່ໃນຊາຍແດນຂອງແຜ່ນດິນ ເຊຣາເຮັມລາໂດຍຮອບ; ຈົ່ງເບິ່ງ, ກອງທັບຂອງຊາວເລມັນໄດ້ ຕິດຕາມພີ່ນ້ອງຂອງພວກເຂົາເຂົ້າໄປໃນຖິ່ນແຫ້ງແລ້ງ ກັນດານ.

๒ ແລະ ຈົ່ງມີການສູ້ຮົບກັນເທື່ອຍິ່ງໃຫຍ່ທີ່ສຸດເກີດຂຶ້ນ; ແທ້ຈິງ ແລ້ວ, ມັນເປັນການສູ້ຮົບຢ່າງທີ່ບໍ່ເຄີຍມີມາກ່ອນໃນບັນດາ ຜູ້ຄົນທັງໝົດໃນແຜ່ນດິນນັບຕັ້ງແຕ່ເວລາທີ່ລີໄຮອອກຈາກ ເຢຣູຊາເລັມມາ; ແທ້ຈິງແລ້ວ, ຊາວເລມັນຫລາຍໝື່ນຄົນຖືກຂ້າ ຕາຍ ແລະ ໄດ້ແຕກກະຈັດກະຈາຍໄປທົ່ວທົບ.

๓ ແທ້ຈິງແລ້ວ, ແລະ ມີການລົ້ມຕາຍເທື່ອຍິ່ງໃຫຍ່ທີ່ສຸດໃນ ບັນດາຜູ້ຄົນຂອງນີໄຟ; ເຖິງຢ່າງໃດກໍຕາມ, ຊາວເລມັນໄດ້ຖືກ ຂັບໄລ່ ແລະ ແຕກກະຈັດກະຈາຍໄປ, ແລະ ຜູ້ຄົນຂອງນີໄຟໄດ້ ກັບຄືນໄປຫາແຜ່ນດິນຂອງຕົນອີກຄືເກົ່າ.

๔ ແລະ ບັດນີ້ມັນເປັນເວລາທີ່ມີການໄວ້ທຸກ ແລະ ການຄ່ຳຄວນ ເທື່ອຍິ່ງໃຫຍ່ທີ່ໄດ້ຍິນໄປທົ່ວແຜ່ນດິນໃນບັນດາຜູ້ຄົນທັງໝົດ ຂອງນີໄຟ—

๕ ແທ້ຈິງແລ້ວ, ສຽງຮ້ອງໄຫ້ຂອງແມ່ໝ້າຍທີ່ໄວ້ທຸກນຳຜົວ ຂອງນາງ, ແລະ ພໍ່ໄວ້ທຸກນຳລູກຊາຍຂອງຕົນ, ແລະ ລູກສາວ ໄວ້ທຸກນຳອ້າຍ, ແທ້ຈິງແລ້ວ, ລູກຊາຍໄວ້ທຸກນຳພໍ່; ແລະ ສຽງ ຮ້ອງໄຫ້ແຫ່ງຄວາມເປັນທຸກໄດ້ຍິນໄປທົ່ວທຸກບ່ອນ, ຊຶ່ງພວກ ເຂົາໄດ້ໄວ້ທຸກນຳຍາດພີ່ນ້ອງຂອງຕົນທີ່ຖືກຂ້າຕາຍ.

๖ ແລະ ບັດນີ້ ນີ້ເປັນວັນທີ່ເສົ້າສະຫລົດໃຈແທ້ໆ; ແທ້ຈິງແລ້ວ, ມັນເປັນເວລາແຫ່ງການນອບນ້ອມ ແລະ ເວລາແຫ່ງ ການຖື ສີນອົດເຂົ້າ ແລະ ອະທິຖານຢ່າງໜັກ.

๗ ແລະ ປີທີສິບຫ້າແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ ຄົນຂອງນີໄຟໄດ້ສິ້ນສຸດລົງແບບນີ້;

๘ ແລະ ນີ້ຄືເລື່ອງລາວຂອງອຳໂມນ ແລະ ພີ່ນ້ອງຂອງລາວ, ກ່ຽວກັບການເດີນທາງຂອງພວກເຂົາໃນແຜ່ນດິນນີໄຟ, ແລະ ຄວາມທຸກທໍລະມານຂອງພວກເຂົາໃນແຜ່ນດິນ, ແລະ ຄວາມ ເສົ້າສະຫລົດໃຈ ແລະ ຄວາມທຸກຂອງພວກເຂົາ, ແລະ ຄວາມ ຜາສຸກທີ່ພວກເຂົາ ບໍ່ອາດສາມາດຈະເຂົ້າໃຈໄດ້, ແລະ ການ ຕ້ອນຮັບ ແລະ ຄວາມປອດໄພຂອງພວກພີ່ນ້ອງໃນແຜ່ນດິນເจີ ຊອນ. ແລະ ບັດນີ້ຂໍພຣະຜູ້ເປັນເจົ້າພຣະຜູ້ໄຖ່ຂອງຄົນທັງປວງ ຈົ່ງໂປດປະທານພອນໃຫ້ແກ່ຈິດວິນຍານຂອງຄົນເຫລົ່ານີ້ ຕະຫລອດໄປຄ້ອຍເຖີດ.

Alma 28

And now it came to pass that after the people of Ammon were established in the land of Jershon, and a church also established in the land of Jershon, and the armies of the Nephites were set round about the land of Jershon, yea, in all the borders round about the land of Zarahemla; behold the armies of the Lamanites had followed their brethren into the wilderness.

And thus there was a tremendous battle; yea, even such an one as never had been known among all the people in the land from the time Lehi left Jerusalem; yea, and tens of thousands of the Lamanites were slain and scattered abroad.

Yea, and also there was a tremendous slaughter among the people of Nephi; nevertheless, the Lamanites were driven and scattered, and the people of Nephi returned again to their land.

And now this was a time that there was a great mourning and lamentation heard throughout all the land, among all the people of Nephi—

Yea, the cry of widows mourning for their husbands, and also of fathers mourning for their sons, and the daughter for the brother, yea, the brother for the father; and thus the cry of mourning was heard among all of them, mourning for their kindred who had been slain.

And now surely this was a sorrowful day; yea, a time of solemnity, and a time of much fasting and prayer.

And thus endeth the fifteenth year of the reign of the judges over the people of Nephi;

And this is the account of Ammon and his brethren, their journeyings in the land of Nephi, their sufferings in the land, their sorrows, and their afflictions, and their incomprehensible joy, and the reception and safety of the brethren in the land of Jershon. And now may the Lord, the Redeemer of all men, bless their souls forever.

ນ ແລະ ນີ້ຄືເລື່ອງລາວຂອງສົງຄາມ ແລະ ການຂັດແຍ້ງກັນໃນ
ບັນດາຊາວນີໄຟ, ແລະ ສົງຄາມລະຫວ່າງຊາວນີໄຟກັບຊາວເລ
ມັນນຳອີກ; ແລະ ປີທີສິບຫ້າແຫ່ງການປົກຄອງຂອງຜູ້ຕັດສິນ
ໄດ້ສິ້ນສຸດລົງ.

And this is the account of the wars and contentions among the Nephites, and also the wars between the Nephites and the Lamanites; and the fifteenth year of the reign of the judges is ended.

ຕ ແລະ ນັບຕັ້ງແຕ່ປີທຳອິດເຖິງປີທີສິບຫ້າໄດ້ເຮັດໃຫ້ເກີດມີ
ຜູ້ຄົນຫລາຍພັນຄົນຖືກຂ້າຕາຍໄປ; ແທ້ຈິງແລ້ວ, ມັນໄດ້ເຮັດ
ໃຫ້ເກີດພາບອັນເປັນຕາຢ້ານຂອງການນອງເລືອດເກີດຂຶ້ນ.

And from the first year to the fifteenth has brought to pass the destruction of many thousand lives; yea, it has brought to pass an awful scene of bloodshed.

ທ ແລະ ຮ່າງກາຍຂອງຫລາຍພັນຄົນຖືກວາງໄວ້ໃນຫລຸມສົບ,
ໃນຂະນະທີ່ຮ່າງກາຍຂອງຫລາຍພັນຄົນກຳລັງ ເນົ່າເປື່ອຍເປັນ
ກອງຢູ່ເທິງໜ້າດິນ; ແທ້ຈິງແລ້ວ, ຫລາຍພັນຄົນໄດ້ ໄວ້ທຸກ
ເພາະວ່າການສູນເສຍຍາດພີ່ນ້ອງຂອງຕົນ, ຍ້ອນວ່າພວກເຂົາ
ມີເຫດຜົນທີ່ຈະຢ້ານກົວຕາມຄຳສັນຍາຂອງພຣະຜູ້ເປັນເຈົ້າ,
ວ່າພວກເຂົາຈະຖືກສົ່ງໄປສູ່ສະພາບແຫ່ງຄວາມຈິບຫາຍອັນ
ບໍ່ມີບ່ອນສິ້ນສຸດ.

And the bodies of many thousands are laid low in the earth, while the bodies of many thousands are moldering in heaps upon the face of the earth; yea, and many thousands are mourning for the loss of their kindred, because they have reason to fear, according to the promises of the Lord, that they are consigned to a state of endless wo.

ທ ຂະນະທີ່ຄົນອື່ນຫລາຍພັນຄົນເປັນທຸກແທ້ໆຢູ່ນັ້ນເພາະການ
ສູນເສຍຍາດພີ່ນ້ອງຂອງຕົນ, ແຕ່ພວກເຂົາຍັງປິຕິຍິນດີໃນ
ຄວາມຫວັງ, ແລະ ແມ່ນແຕ່ຮູ້ຈັກຕາມ ຄຳສັນຍາຂອງພຣະຜູ້
ເປັນເຈົ້າວ່າ ພວກເຂົາຈະຖືກຍົກຂຶ້ນໃຫ້ຢູ່ທາງເບື້ອງຂວາພຣະ
ຫັດຂອງພຣະເຈົ້າໃນສະພາບແຫ່ງຄວາມສຸກອັນບໍ່ມີບ່ອນ
ສິ້ນສຸດ.

While many thousands of others truly mourn for the loss of their kindred, yet they rejoice and exult in the hope, and even know, according to the promises of the Lord, that they are raised to dwell at the right hand of God, in a state of never-ending happiness.

ນ ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າ ຄວາມບໍ່ສະເໝີພາບຂອງ
ມະນຸດນັ້ນມີຫລາຍຊ່ຳໃດ, ເພາະວ່າບາບ ແລະ ການລ່ວງ
ລະເມີດ ແລະ ອຳນາດຂອງມານຊຶ່ງເກີດຂຶ້ນດ້ວຍ ແຜນການທີ່ມີ
ເລ່ຫລ່ຽມ ຊຶ່ງມັນຄົ້ນຄິດຂຶ້ນມາເພື່ອເຮັດໃຫ້ໃຈຂອງມະນຸດຖືກ
ບ້ວງ.

And thus we see how great the inequality of man is because of sin and transgression, and the power of the devil, which comes by the cunning plans which he hath devised to ensnare the hearts of men.

ສ ແລະ ພວກເຮົາຈຶ່ງເຫັນການເອີ້ນຄວາມພາກພຽນຂອງ
ມະນຸດຄັ້ງໃຫຍ່ເພື່ອໃຫ້ເຮັດວຽກໃນ ສວນອະງຸ່ນຂອງພຣະຜູ້
ເປັນເຈົ້າດັ່ງນັ້ນ; ແລະ ພວກເຮົາຈຶ່ງເຫັນເຫດຜົນອັນຍິ່ງໃຫຍ່
ຂອງການເສົ້າສະຫລົດໃຈ, ແລະ ການຊື່ນຊົມນຳອີກດັ່ງນັ້ນ—ມີ
ຄວາມເສົ້າສະຫລົດໃຈຍ້ອນວ່າຄວາມຕາຍ ແລະ ຄວາມພິນາດ
ໃນບັນດາມະນຸດ, ແລະ ມີຄວາມຊື່ນຊົມຍ້ອນວ່າ ຄວາມ
ສະຫว่ານ້ຂອງພຣະຄຣິດຍັງມີຕໍ່ຊີວິດຢູ່.

And thus we see the great call of diligence of men to labor in the vineyards of the Lord; and thus we see the great reason of sorrow, and also of rejoicing—sorrow because of death and destruction among men, and joy because of the light of Christ unto life.

ແອວມາ ๘๙

๑ ໂอ້ ຖ້າຫາກຂ້າພະເຈົ້າເປັນທູດ, ແລະ ສາມາດປາດຖະໜາໄດ້ ຕາມໃຈຊອບຂອງຂ້າພະເຈົ້າ, ແລ້ວຂ້າພະເຈົ້າຈະອອກໄປເວົ້າ ດ້ວຍສຽງແກຂອງພຣະເຈົ້າ, ດ້ວຍສຽງທີ່ສັ່ນສະເທືອນ ແຜ່ນດິນໂລກ, ແລະ ຮ້ອງປ່າວການກັບໃຈຕໍ່ທຸກໆຄົນ!

๒ ແທ້ຈິງແລ້ວ, ຂ້າພະເຈົ້າຈະປະກາດເຖິງເລື່ອງການກັບໃຈ, ແລະ ແຜນແຫ່ງການໄຖ່ແກ່ທຸກຈິດວິນຍານໃຫ້ດັງຄືສຽງຟ້າ ຮ້ອງ, ເພື່ອພວກເຂົາຈະກັບໃຈ ແລະ ມາຫາພຣະເຈົ້າຂອງພວກ ເຮົາ, ເພື່ອພວກເຂົາຈະບໍ່ມີຄວາມເສົ້າສະຫລົດໃຈໃນທົ່ວໜ້າ ແຜ່ນດິນໂລກອີກເລີຍ.

๓ ແຕ່ຈົ່ງເບິ່ງ, ຂ້າພະເຈົ້າເປັນມະນຸດ, ແລະ ເຮັດບາບໄດ້ໃນ ຄວາມປາດຖະໜາຂອງຂ້າພະເຈົ້າເອງ; ດັ່ງນັ້ນຂ້າພະເຈົ້າຄວນ ພໍໃຈກັບສິ່ງທີ່ພຣະຜູ້ເປັນເຈົ້າໄດ້ແບ່ງປັນໃຫ້ຂ້າພະເຈົ້າ.

๔ ຂ້າພະເຈົ້າບໍ່ຄວນຈະປ່ຽນຄວາມປາດຖະໜາຂອງຂ້າພະເຈົ້າ ຊຶ່ງເປັນຄຳສັ່ງອັນໝັ້ນຄົງຂອງພຣະຜູ້ທ່ຽງທຳ, ເພາະ ຂ້າພະເຈົ້າຮູ້ວ່າ ພຣະອົງປະທານໃຫ້ມະນຸດຕາມ ຄວາມ ປາດຖະໜາຂອງເຂົາ, ບໍ່ວ່າມັນຈະເປັນໄປເພື່ອຄວາມຕາຍ ຫລື ເພື່ອຊີວິດ; ແທ້ຈິງແລ້ວ, ຂ້າພະເຈົ້າຮູ້ວ່າ ພຣະອົງໄດ້ແບ່ງປັນ ໃຫ້ມະນຸດ, ແທ້ຈິງແລ້ວ, ໄດ້ມອບຄຳສັ່ງແກ່ເຂົາຊຶ່ງເປັນຄຳສັ່ງທີ່ ປ່ຽນແປງບໍ່ໄດ້, ອີງຕາມ ຄວາມປະສົງຂອງເຂົາ, ບໍ່ວ່າມັນຈະ ເປັນໄປເພື່ອຄວາມລອດ ຫລື ເພື່ອຄວາມພິນາດ.

๕ ແທ້ຈິງແລ້ວ, ແລະ ຂ້າພະເຈົ້າຮູ້ວ່າ ຄວາມດີ ແລະ ຄວາມຊົ່ວ ມາຢູ່ຕໍ່ໜ້າມະນຸດທັງປວງ; ຜູ້ໃດທີ່ບໍ່ຮູ້ຈັກຄວາມດີຈາກຄວາມ ຊົ່ວກໍບໍ່ມີຂໍ້ຕຳນິ; ແຕ່ຜູ້ໃດທີ່ ຮູ້ຈັກຄວາມດີ ແລະ ຄວາມຊົ່ວ, ເຂົາ ຈະໄດ້ຮັບຕາມຄວາມປາດຖະໜາຂອງເຂົາ ບໍ່ວ່າເຂົາ ປາດຖະໜາຄວາມດີ ຫລື ຄວາມຊົ່ວ, ຊີວິດ ຫລື ຄວາມຕາຍ, ຄວາມຊື່ນຊົມ ຫລື ຄວາມເສຍໃຈໃນ ຈິດສຳນຶກ.

๖ ບັດນີ້, ໂດຍທີ່ເຫັນວ່າຂ້າພະເຈົ້າເອງຮູ້ຈັກເລື່ອງເຫລົ່ານີ້ ແລ້ວ, ເປັນຫຍັງຂ້າພະເຈົ້າຈຶ່ງບໍ່ປາດຖະໜາເກີນກວ່າທີ່ຈະ ເຮັດວຽກງານ ຊຶ່ງຂ້າພະເຈົ້າຖືກເອີ້ນມາໃຫ້ເຮັດ?

๗ ເປັນຫຍັງຂ້າພະເຈົ້າຈຶ່ງປາດຖະໜາຢາກເປັນທູດ, ເພື່ອຈະ ໄດ້ປະກາດໄປຈົນເຖິງທີ່ສຸດຂອງແຜ່ນດິນໂລກ?

๘ ເພາະຈົ່ງເບິ່ງ, ພຣະຜູ້ເປັນເຈົ້າປະທານໃຫ້ ທຸກປະຊາຊາດ ດ້ວຍຊາດ ແລະ ພາສາຂອງຕົນເອງເພື່ອສິດສອນພຣະຄຳຂອງ ພຣະອົງ, ແທ້ຈິງແລ້ວ, ໃນສະຕິປັນຍາ, ທຸກສິ່ງທຸກຢ່າງທີ່ ພຣະອົງ ເຫັນວ່າເໝາະສົມທີ່ພວກເຂົາຄວນມີ; ສະນັ້ນ ເຮົາຈຶ່ງ ເຫັນໄດ້ວ່າພຣະຜູ້ເປັນເຈົ້າແນະນຳດ້ວຍຄວາມສະຫລຽວ ສະຫລາດຕາມສິ່ງທີ່ທ່ຽງທຳ ແລະ ເປັນຄວາມຈິງ.

Alma 29

O that I were an angel, and could have the wish of mine heart, that I might go forth and speak with the trump of God, with a voice to shake the earth, and cry repentance unto every people!

Yea, I would declare unto every soul, as with the voice of thunder, repentance and the plan of redemption, that they should repent and come unto our God, that there might not be more sorrow upon all the face of the earth.

But behold, I am a man, and do sin in my wish; for I ought to be content with the things which the Lord hath allotted unto me.

I ought not to harrow up in my desires the firm decree of a just God, for I know that he granteth unto men according to their desire, whether it be unto death or unto life; yea, I know that he allotteth unto men, yea, decreeth unto them decrees which are unalterable, according to their wills, whether they be unto salvation or unto destruction.

Yea, and I know that good and evil have come before all men; he that knoweth not good from evil is blameless; but he that knoweth good and evil, to him it is given according to his desires, whether he desireth good or evil, life or death, joy or remorse of conscience.

Now, seeing that I know these things, why should I desire more than to perform the work to which I have been called?

Why should I desire that I were an angel, that I could speak unto all the ends of the earth?

For behold, the Lord doth grant unto all nations, of their own nation and tongue, to teach his word, yea, in wisdom, all that he seeth fit that they should have; therefore we see that the Lord doth counsel in wisdom, according to that which is just and true.

ຂ້າພະເຈົ້າຮູ້ຈັກເລື່ອງທີ່ພຣະຜູ້ເປັນເຈົ້າບັນຊາຂ້າພະເຈົ້າ, ແລະ ຂ້າພະເຈົ້າປາບປື້ມໃນເລື່ອງນັ້ນ. ຂ້າພະເຈົ້າບໍ່ໄດ້ ປາບປື້ມ ໃນຕົວຂ້າພະເຈົ້າເອງ, ແຕ່ຂ້າພະເຈົ້າປາບປື້ມໃນສິ່ງທີ່ພຣະຜູ້ ເປັນເຈົ້າບັນຊາຂ້າພະເຈົ້າ; ແທ້ຈິງແລ້ວ, ນີ້ຄືຄວາມປາບປື້ມ ຂອງຂ້າພະເຈົ້າ ເພື່ອບາງທີຂ້າພະເຈົ້າອາດຈະເປັນເຄື່ອງມືໃນ ພຣະຫັດຂອງພຣະເຈົ້າໃນການນຳຈິດວິນຍານດວງໜຶ່ງມາສູ່ ການກັບໃຈ; ແລະ ນີ້ຄືຄວາມສຸກຂອງຂ້າພະເຈົ້າ.

I know that which the Lord hath commanded me, and I glory in it. I do not glory of myself, but I glory in that which the Lord hath commanded me; yea, and this is my glory, that perhaps I may be an instrument in the hands of God to bring some soul to repentance; and this is my joy.

ແລະ ຈົ່ງເບິ່ງ, ເມື່ອຂ້າພະເຈົ້າເຫັນພີ່ນ້ອງຂອງຂ້າພະເຈົ້າ ຫລາຍຄົນທີ່ສຳນຶກຜິດດ້ວຍຄວາມຈິງໃຈ, ແລ້ວເຂົ້າມາຫາພຣະ ຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ເວລານັ້ນ ຈິດວິນຍານຂອງຂ້າພະເຈົ້າເຕັມໄປດ້ວຍຄວາມສຸກ; ແລ້ວ ຂ້າພະເຈົ້າສຳນຶກໄດ້ວ່າ ມີ ສິ່ງໃດແດ່ທີ່ພຣະຜູ້ເປັນເຈົ້າໄດ້ກະທຳ ເພື່ອຂ້າພະເຈົ້າ; ແທ້ຈິງແລ້ວ, ພຣະອົງໄດ້ຍິນຄຳອະທິຖານຂອງ ຂ້າພະເຈົ້າ; ແທ້ຈິງແລ້ວ, ຂ້າພະເຈົ້າສຳນຶກເຖິງພຣະຫັດທີ່ມີ ຄວາມເມດຕາປານີຂອງພຣະອົງຊຶ່ງເດ່ມາຫາຂ້າພະເຈົ້າ.

And behold, when I see many of my brethren truly penitent, and coming to the Lord their God, then is my soul filled with joy; then do I remember what the Lord has done for me, yea, even that he hath heard my prayer; yea, then do I remember his merciful arm which he extended towards me.

ແທ້ຈິງແລ້ວ, ແລະ ຂ້າພະເຈົ້າສຳນຶກໄດ້ເຖິງຄວາມເປັນ ຊະເລີຍຂອງບັນພະບຸລຸດຂອງຂ້າພະເຈົ້ານຳອີກ; ເພາະ ຂ້າພະເຈົ້າຮູ້ຈັກວ່າ ພຣະຜູ້ເປັນເຈົ້າໄດ້ປົດປ່ອຍເຂົາເຈົ້າອອກ ຈາກຄວາມເປັນທາດ ແລະ ດ້ວຍເຫດນີ້ ຈຶ່ງໄດ້ສະຖາປະນາ ສາດສະໜາຈັກຂອງພຣະອົງຂຶ້ນ; ແທ້ຈິງແລ້ວ, ອົງພຣະຜູ້ເປັນ ເຈົ້າ, ພຣະເຈົ້າຂອງອັບຣາຮາມ, ພຣະເຈົ້າຂອງອີຊາກ, ແລະ ພຣະເຈົ້າຂອງຢາໂຄບໄດ້ປົດປ່ອຍເຂົາເຈົ້າອອກຈາກຄວາມເປັນ ທາດ.

Yea, and I also remember the captivity of my fathers; for I surely do know that the Lord did deliver them out of bondage, and by this did establish his church; yea, the Lord God, the God of Abraham, the God of Isaac, and the God of Jacob, did deliver them out of bondage.

ແທ້ຈິງແລ້ວ, ຂ້າພະເຈົ້າຈື່ຈຳຢູ່ສະເໝີເຖິງການເປັນຊະເລີຍ ຂອງບັນພະບຸລຸດຂອງຂ້າພະເຈົ້າ; ແລະ ພຣະເຈົ້າອົງດຽວກັນ ນັ້ນໄດ້ ປົດປ່ອຍເຂົາເຈົ້າໃຫ້ພົ້ນຈາກກຳມືຂອງຊາວເອຢິບ ແລະ ໄດ້ປົດປ່ອຍເຂົາເຈົ້າອອກຈາກຄວາມເປັນທາດ.

Yea, I have always remembered the captivity of my fathers; and that same God who delivered them out of the hands of the Egyptians did deliver them out of bondage.

ແທ້ຈິງແລ້ວ, ແລະ ພຣະເຈົ້າອົງດຽວກັນນັ້ນ ຊຶ່ງໄດ້ ສະຖາປະນາສາດສະໜາຈັກຂອງພຣະອົງຂຶ້ນໃນບັນດາພວກ ເຂົາ; ແທ້ຈິງແລ້ວ, ແມ່ນພຣະເຈົ້າອົງດຽວກັນນັ້ນທີ່ໄດ້ເອີ້ນໃຫ້ ຂ້າພະເຈົ້າຮັບເອົາຕຳແໜ່ງອັນສັກສິດ, ເພື່ອສັ່ງສອນພຣະຄຳ ໃຫ້ແກ່ຜູ້ຄົນພວກນີ້, ແລະ ໄດ້ປະທານຄວາມສຳເລັດຢ່າງ ຫລວງຫລາຍໃຫ້ແກ່ຂ້າພະເຈົ້າ, ຊຶ່ງມັນເຮັດໃຫ້ຂ້າພະເຈົ້າເຕັມ ໄປດ້ວຍ ຄວາມສຸກ.

Yea, and that same God did establish his church among them; yea, and that same God hath called me by a holy calling, to preach the word unto this people, and hath given me much success, in the which my joy is full.

ແຕ່ຂ້າພະເຈົ້າບໍ່ໄດ້ປິຕິຍິນດີໃນຄວາມສຳເລັດຂອງຂ້າພະເຈົ້າ ແຕ່ຝ່າຍດຽວເທົ່ານັ້ນ, ແຕ່ຂ້າພະເຈົ້າເຕັມປ່ຽມໄປດ້ວຍຄວາມ ສຸກໃນ ຄວາມສຳເລັດຂອງພີ່ນ້ອງຂອງຂ້າພະເຈົ້າ, ຜູ້ທີ່ໄດ້ຂຶ້ນ ໄປຫາແຜ່ນດິນນີໄຟນຳອີກ.

But I do not joy in my own success alone, but my joy is more full because of the success of my brethren, who have been up to the land of Nephi.

ຈົ່ງເບິ່ງ, ເຂົາເຈົ້າໄດ້ອອກແຮງງານຢ່າງດຸໝັ່ນ, ແລະ ໄດ້ນຳ ເອົາຜົນງານຢ່າງຫລວງຫລາຍອອກມາ; ແລະ ລາງວັນຂອງ ພວກເຂົານັ້ນຍິ່ງໃຫຍ່ແທ້ໆ!

Behold, they have labored exceedingly, and have brought forth much fruit; and how great shall be their reward!

ບັດນີ້, ເມື່ອຂ້າພະເຈົ້າຄິດເຖິງຄວາມສຳເລັດຂອງພີ່ນ້ອງ
ເຫລົ່ານີ້ຂອງຂ້າພະເຈົ້າ ຈິດວິນຍານຂອງຂ້າພະເຈົ້າກໍຖືກພາ
ໄປ, ຈົນວ່າມັນຖືກແຍກອອກຈາກຮ່າງກາຍ, ຄືກັບວ່າ ມັນເປັນ
ຄວາມສຸກທີ່ສຸດຂອງຂ້າພະເຈົ້າ.

ແລະ ບັດນີ້ຂໍພຣະເຈົ້າຈົ່ງໂປດປະທານແກ່ຄົນເຫລົ່ານີ້,
ພີ່ນ້ອງຂອງຂ້າພະເຈົ້າ, ເພື່ອພວກເຂົາຈະໄດ້ນັ່ງລົງໃນ
ອານາຈັກຂອງພຣະເຈົ້າດ້ວຍເຖີດ; ແທ້ຈິງແລ້ວ, ແລະ ໃຫ້ແກ່
ຄົນທັງໝົດຜູ້ເປັນຜົນງານຈາກການອອກແຮງງານຂອງພວກ
ເຂົານຳອີກ. ເພື່ອພວກເຂົາຈະບໍ່ອອກໄປອີກ, ແຕ່ເພື່ອພວກເຂົາ
ຈະສັນລະເສີນພຣະອົງຕະຫລອດໄປ. ແລະ ຂໍພຣະເຈົ້າຈົ່ງໂປດ
ປະທານເພື່ອໃຫ້ເປັນໄປຕາມຄຳເວົ້າຂອງຂ້າພະເຈົ້າທີ່ໄດ້ເວົ້າໄວ້
ດ້ວຍເຖີດ. ອາແມນ.

Now, when I think of the success of these my brethren my soul is carried away, even to the separation of it from the body, as it were, so great is my joy.

And now may God grant unto these, my brethren, that they may sit down in the kingdom of God; yea, and also all those who are the fruit of their labors that they may go no more out, but that they may praise him forever. And may God grant that it may be done according to my words, even as I have spoken. Amen.

ແອວມາ ມ0

Alma 30

Behold, now it came to pass that after the people of Ammon were established in the land of Jershon, yea, and also after the Lamanites were driven out of the land, and their dead were buried by the people of the land—

Now their dead were not numbered because of the greatness of their numbers; neither were the dead of the Nephites numbered—but it came to pass after they had buried their dead, and also after the days of fasting, and mourning, and prayer, (and it was in the sixteenth year of the reign of the judges over the people of Nephi) there began to be continual peace throughout all the land.

Yea, and the people did observe to keep the commandments of the Lord; and they were strict in observing the ordinances of God, according to the law of Moses; for they were taught to keep the law of Moses until it should be fulfilled.

And thus the people did have no disturbance in all the sixteenth year of the reign of the judges over the people of Nephi.

And it came to pass that in the commencement of the seventeenth year of the reign of the judges, there was continual peace.

But it came to pass in the latter end of the seventeenth year, there came a man into the land of Zarahemla, and he was Anti-Christ, for he began to preach unto the people against the prophecies which had been spoken by the prophets, concerning the coming of Christ.

Now there was no law against a man's belief; for it was strictly contrary to the commands of God that there should be a law which should bring men on to unequal grounds.

For thus saith the scripture: Choose ye this day, whom ye will serve.

Now if a man desired to serve God, it was his privilege; or rather, if he believed in God it was his privilege to serve him; but if he did not believe in him there was no law to punish him.

ᥑ ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກ ຜູ້ຄົນຂອງ ອຳໂມນໄດ້ຕັ້ງຖິ່ນຖານຢູ່ໃນແຜ່ນດິນເຈີຊອນແລ້ວ, ແທ້ຈິງ ແລ້ວ, ແລະ ຫລັງຈາກທີ່ຊາວເລມັນຖືກ ຂັບໄລ່ອອກໄປຈາກ ແຜ່ນດິນແລ້ວ, ແລະ ຊາກສົບຂອງພວກເຂົາໄດ້ຖືກເອົາໄປຝັງ ໂດຍຜູ້ຄົນຜູ້ທີ່ຢູ່ໃນແຜ່ນດິນນັ້ນ—

ᥒ ບັດນີ້ພວກເຂົາບໍ່ໄດ້ນັບຈຳນວນຊາກສົບຂອງຊາວເລມັນ ຍ້ອນວ່າຄວາມຫລວງຫລາຍຂອງມັນ; ທັງບໍ່ໄດ້ນັບຈຳນວນ ຊາກສົບຂອງຊາວນີໄຟຄືກັນ—ແຕ່ເຫດການໄດ້ບັງເກີດຂຶ້ນ ຫລັງຈາກທີ່ພວກເຂົາໄດ້ຝັງສົບຂອງຜູ້ຕາຍແລ້ວ, ແລະ ຫລັງຈາກມື້ແຫ່ງການຖືສິນອົດເຂົ້າ ແລະ ການໄວ້ທຸກ, ແລະ ການອະທິຖານລ່ວງໄປແລ້ວ, ມັນຈຶ່ງເລີ່ມມີສັນຕິສຸກທົ່ວ ແຜ່ນດິນ (ແລະ ມັນເປັນໄປໃນປີທີສິບຫົກແຫ່ງການປົກຄອງ ຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ).

ᥓ ແທ້ຈິງແລ້ວ, ແລະ ຜູ້ຄົນໄດ້ຍຶດຖືທີ່ຈະຮັກສາພຣະບັນຍັດ ຂອງພຣະຜູ້ເປັນເຈົ້າ; ແລະ ພວກເຂົາໄດ້ເຄັ່ງຄັດໃນການຍຶດຖື ພິທີການຂອງພຣະເຈົ້າຕາມກົດຂອງໂມເຊ; ເພາະວ່າພວກເຂົາ ໄດ້ຮັບການສິດສອນໃຫ້ ຮັກສາກົດຂອງໂມເຊໄປຈົນກວ່າມັນຈະ ສົມບູນ.

ᥔ ແລະ ດັ່ງນັ້ນຜູ້ຄົນຈຶ່ງບໍ່ມີຄວາມຫຍຸ້ງຍາກຕະຫລອດປີທີສິບ ຫົກແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ.

ᥕ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີທີສິບເຈັດແຫ່ງການ ປົກຄອງຂອງຜູ້ຕັດສິນ ມັນກໍຍັງມີສັນຕິສຸກຢູ່ເລື້ອຍໆໄປ.

ᥖ ແຕ່ ເຫດການໄດ້ບັງເກີດຂຶ້ນໃນທ້າຍປີທີສິບເຈັດ ມີຄົນ ຜູ້ໜຶ່ງໄດ້ເຂົ້າມາໃນແຜ່ນດິນເຊຣາເຮັມລາ, ແລະ ລາວເປັນ ຜູ້ ຕໍ່ຕ້ານພຣະຄຣິດ, ແລະ ລາວໄດ້ເລີ່ມສັ່ງສອນຜູ້ຄົນບໍ່ໃຫ້ເຫັນດີ ກັບຄຳທຳນາຍ ຊຶ່ງສາດສະດາໄດ້ທຳນາຍກ່ຽວກັບການສະເດັດ ມາຂອງພຣະຄຣິດ.

ᥗ ບັດນີ້ມັນບໍ່ມີກົດໝາຍທີ່ຈະຂັດຂວາງ ຄວາມເຊື່ອຖືຂອງຄົນ, ເພາະມັນເປັນສິ່ງກົງກັນຂ້າມກັບພຣະບັນຍັດຂອງພຣະເຈົ້າທີ່ ຈະມີກົດຊຶ່ງນຳພາມະນຸດໄປສູ່ພື້ນຖານທີ່ບໍ່ສະເໝີພາບກັນ.

ᥘ ເພາະຂໍ້ຄວາມພຣະຄຳພີໄດ້ກ່າວດັ່ງນີ້: ເຈົ້າຈົ່ງ ເລືອກເອົາໃນ ມື້ນີ້ວ່າ, ເຈົ້າຈະຮັບໃຊ້ຜູ້ໃດ.

ᥙ ບັດນີ້ຖ້າຫາກຜູ້ໃດປາດຖະໜາທີ່ຈະຮັບໃຊ້ພຣະເຈົ້າ, ມັນກໍ ເປັນສິດທິຂອງເຂົາ; ຫລື ຖ້າຫາກເຂົາຈະເຊື່ອຟັງພຣະເຈົ້າ, ມັນ ກໍເປັນສິດທິຂອງເຂົາທີ່ຈະຮັບໃຊ້ພຣະອົງ; ແຕ່ຖ້າຫາກເຂົາບໍ່ ເຊື່ອໃນພຣະອົງ ມັນກໍບໍ່ມີກົດອັນໃດທີ່ຈະມາລົງ�โทດເຂົາໄດ້.

๑๐ ແຕ່ຖ້າຫາກເຂົາເຮັດການຄາດຕະກຳ ເຂົາກໍຈະຖືກລົງโทด ຈົນເຖິງແກ່ ຄວາມຕາຍ; ແລະ ຖ້າຫາກເຂົາປຸ້ນຈີ້ຄົນ ເຂົາກໍຈະ ຖືກລົງโทด; ແລະ ຖ້າຫາກເຂົາລັກ ເຂົາກໍຈະຖືກລົງโทด; ແລະ ຖ້າຫາກເຂົາຫລິ້ນຊູ້ ເຂົາກໍຈະຖືກລົງโทดຄືກັນ; ແທ້ຈິງແລ້ວ, ເພາະຄວາມຊົ່ວຮ້າຍທັງໝົດນີ້ ພວກເຂົາຈົ່ງຖືກລົງโทด.

But if he murdered he was punished unto death; and if he robbed he was also punished; and if he stole he was also punished; and if he committed adultery he was also punished; yea, for all this wickedness they were punished.

๑๑ ເພາະວ່າກົດໝາຍມີຢູ່ວ່າ ມະນຸດຈະຕ້ອງຖືກຕັດສິນຕາມ ຄວາມຜິດຂອງຕົນ. ເຖິງຢ່າງໃດກໍຕາມ, ມັນກໍບໍ່ມີກົດໝາຍທີ່ ຈະຫ້າມຄວາມເຊື່ອຖືຂອງຄົນ; ສະນັ້ນ, ມະນຸດຈະຖືກລົງโทด ຕາມຄວາມຜິດ ຊຶ່ງພວກເຂົາໄດ້ເຮັດໄປເທົ່ານັ້ນ; ສະນັ້ນ ຄົນ ທັງປວງຈົ່ງຢູ່ໃນພື້ນຖານທີ່ ສະເໝີພາບກັນ.

For there was a law that men should be judged according to their crimes. Nevertheless, there was no law against a man's belief; therefore, a man was punished only for the crimes which he had done; therefore all men were on equal grounds.

๑๘ ແລະ ຜູ້ຕໍ່ຕ້ານພຣະຄຣິດຜູ້ນີ້ມີຊື່ວ່າ ໂຄຣິຮໍ (ແລະ ກົດບໍ່ມີ ອຳນາດກັບລາວໄດ້) ລາວເລີ່ມສັ່ງສອນຜູ້ຄົນວ່າ ມັນຈະບໍ່ມີ ພຣະຄຣິດ. ແລະ ລາວໄດ້ສັ່ງສອນຕາມວິທີນີ້, ໂດຍກ່າວວ່າ:

And this Anti-Christ, whose name was Korihor, (and the law could have no hold upon him) began to preach unto the people that there should be no Christ. And after this manner did he preach, saying:

๑๙ ໂອ້ ພວກທ່ານຜູ້ຖືກມັດໄວ້ຢູ່ໃຕ້ຄວາມຫວັງອັນໂງ່ຈ້າ ແລະ ບໍ່ມີປະໂຫຍດ, ເປັນຫຍັງພວກທ່ານຈົ່ງແບກເອົາຄວາມໂງ່ຈ້າ ໄວ້ກັບຕົນເອງ? ເປັນຫຍັງພວກທ່ານຈົ່ງຊອກຫາພຣະຄຣິດ? ເພາະວ່າບໍ່ມີຜູ້ໃດທີ່ຈະຮູ້ຈັກສິ່ງທີ່ຈະມາເຖິງ.

O ye that are bound down under a foolish and a vain hope, why do ye yoke yourselves with such foolish things? Why do ye look for a Christ? For no man can know of anything which is to come.

๑๔ ຈົ່ງເບິ່ງ, ສິ່ງເຫລົ່ານີ້ທີ່ພວກທ່ານເອີ້ນວ່າຄຳທຳນາຍ, ຊຶ່ງ ພວກທ່ານກ່າວວ່າມັນຖືກມອບຕໍ່ໆກັນມາໂດຍສາດສະດາຜູ້ ບໍລິສຸດ, ຈົ່ງເບິ່ງ, ມັນເປັນຮີດຄອງປະເພນີອັນໂງ່ຈ້າຂອງ ບັນພະບຸລຸດຂອງພວກທ່ານ.

Behold, these things which ye call prophecies, which ye say are handed down by holy prophets, behold, they are foolish traditions of your fathers.

๑๕ ພວກທ່ານຮູ້ຈັກຄວາມແນ່ນອນຂອງມັນໄດ້ແນວໃດ? ຈົ່ງ ເບິ່ງ, ພວກທ່ານບໍ່ສາມາດຮູ້ຈັກສິ່ງທີ່ພວກທ່ານບໍ່ ເຫັນ; ສະນັ້ນ ພວກທ່ານຈົ່ງບໍ່ສາມາດຮູ້ໄດ້ວ່າ ມັນຈະມີພຣະຄຣິດ.

How do ye know of their surety? Behold, ye cannot know of things which ye do not see; therefore ye cannot know that there shall be a Christ.

๑๖ ພວກທ່ານຫວັງ ແລະ ກ່າວວ່າພວກທ່ານເຫັນການປົດບາບ ຂອງພວກທ່ານເອງ. ແຕ່ຈົ່ງເບິ່ງ, ມັນເປັນຄວາມຄິດທີ່ບ້າໆ ແລະ ຄວາມຜິດປົກກະຕິຂອງຈິດໃຈຂອງພວກທ່ານ; ແລະ ເກີດຂຶ້ນຍ້ອນວ່າຮີດຄອງປະເພນີຂອງບັນພະບຸລຸດຂອງພວກ ທ່ານ, ຊຶ່ງນຳພາພວກທ່ານໄປເຊື່ອຖືໃນສິ່ງທີ່ເປັນໄປບໍ່ໄດ້.

Ye look forward and say that ye see a remission of your sins. But behold, it is the effect of a frenzied mind; and this derangement of your minds comes because of the traditions of your fathers, which lead you away into a belief of things which are not so.

๑๗ ແລະ ລາວໄດ້ເວົ້າກັບພວກເຂົາອີກຫລາຍເລື່ອງໃນລັກສະນະ ດຽວກັນນີ້ໂດຍບອກພວກເຂົາວ່າ ມັນຈະບໍ່ມີການຊົດໃຊ້ແທນ ບາບຂອງມະນຸດເກີດຂຶ້ນຢ່າງເດັດຂາດ, ແຕ່ວ່າມະນຸດແຕ່ລະຄົນ ເປັນຢູ່ໃນຊີວິດນີ້ ຕາມການດຳເນີນຊີວິດຂອງຕົນເອງ; ສະນັ້ນ ມະນຸດແຕ່ລະຄົນມີຄວາມຮຸ່ງເຮືອງຕາມຄວາມສະຫລາດຂອງ ຕົນເອງ, ແລະ ວ່າທຸກຄົນຊະນະຕາມກຳລັງຂອງຕົນເອງ; ແລະ ແມ່ນຫຍັງກໍຕາມທີ່ຕົນເອງກະທຳໄປນັ້ນ ຈະບໍ່ມີຄວາມຜິດ ເລີຍ.

And many more such things did he say unto them, telling them that there could be no atonement made for the sins of men, but every man fared in this life according to the management of the creature; therefore every man prospered according to his genius, and that every man conquered according to his strength; and whatsoever a man did was no crime.

໑໘ ແລະ ລາວໄດ້ສັ່ງສອນພວກເຂົາແບບນີ້, ແລະ ໄດ້ຊັກຈູງໃຈ
ຫລາຍດວງໄປ, ເຮັດໃຫ້ພວກເຂົາເບີກບານໃນຄວາມຊົ່ວຮ້າຍ
ຂອງພວກເຂົາ, ແທ້ຈິງແລ້ວ, ໄດ້ຊັກຈູງພວກຜູ້ຍິງ ແລະ ພວກ
ຜູ້ຊາຍເປັນຈຳນວນຫລວງຫລາຍນຳອີກໃຫ້ທຳການໂສເພນີ—
ບອກພວກເຂົາວ່າ ເວລາຄົນຕາຍໄປ ມັນເປັນທີ່ສຸດຂອງຊີວິດ.

And thus he did preach unto them, leading away the hearts of many, causing them to lift up their heads in their wickedness, yea, leading away many women, and also men, to commit whoredoms—telling them that when a man was dead, that was the end thereof.

໑໙ ບັດນີ້ຄົນຜູ້ນີ້ໄດ້ໄປຫາແຜ່ນດິນເຈີຊອນ ເພື່ອສັ່ງສອນເລື່ອງ
ເຫລົ່ານີ້ໃນບັນດາຜູ້ຄົນຂອງອຳໂມນນຳອີກ, ຊຶ່ງເຄີຍເປັນຜູ້ຄົນ
ຂອງຊາວເລມັນມາກ່ອນ.

Now this man went over to the land of Jershon also, to preach these things among the people of Ammon, who were once the people of the Lamanites.

໒໐ ແຕ່ຈົ່ງເບິ່ງ, ພວກເຂົາສະຫລາດກວ່າຊາວນີໄຟເປັນຈຳນວນ
ຫລວງຫລາຍ; ເພາະວ່າພວກເຂົາໄດ້ຈັບ ແລະ ມັດລາວ, ແລະ
ໄດ້ພາລາວໄປຢູ່ຕໍ່ໜ້າອຳໂມນຜູ້ເປັນມະຫາປະໂລຫິດປົກຄອງ
ຜູ້ຄົນພວກນັ້ນ.

But behold they were more wise than many of the Nephites; for they took him, and bound him, and carried him before Ammon, who was a high priest over that people.

໒໑ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນສັ່ງໃຫ້ລາວອອກຈາກ
ແຜ່ນດິນໄປ. ແລະ ລາວໄດ້ເຂົ້າໄປໃນແຜ່ນດິນກີເດໂອນ ແລະ
ເລີ່ມສັ່ງສອນພວກເຂົານຳອີກ, ແລະ ບ່ອນນີ້ລາວບໍ່ໄດ້ຮັບຄວາມ
ສຳເລັດເລີຍ, ເພາະວ່າລາວຖືກຈັບ ແລະ ມັດໄວ້, ແລະ ຖືກພາ
ໄປຢູ່ຕໍ່ໜ້າມະຫາປະໂລຫິດ ແລະ ຫົວໜ້າຜູ້ຕັດສິນປົກຄອງ
ແຜ່ນດິນ.

And it came to pass that he caused that he should be carried out of the land. And he came over into the land of Gideon, and began to preach unto them also; and here he did not have much success, for he was taken and bound and carried before the high priest, and also the chief judge over the land.

໒໒ ແລະ ເຫດການໄດ້ບັງເກີດຂຶ້ນຄື ມະຫາປະໂລຫິດໄດ້ຖາມ
ລາວວ່າ: ເປັນຫຍັງເຈົ້າຈຶ່ງທ່ຽວບິດເບືອນທາງຂອງພຣະຜູ້ເປັນ
ເຈົ້າ? ເປັນຫຍັງເຈົ້າຈຶ່ງສິດສອນຜູ້ຄົນພວກນີ້ວ່າມັນຈະບໍ່ມີ
ພຣະຄຣິດເພື່ອຂັດຂວາງຄວາມຊື່ນຊົມຂອງພວກເຂົາ? ເປັນ
ຫຍັງເຈົ້າຈຶ່ງເວົ້າຂັດກັບການທຳນາຍທັງໝົດຂອງສາດສະດາຜູ້
ບໍລິສຸດ?

And it came to pass that the high priest said unto him: Why do ye go about perverting the ways of the Lord? Why do ye teach this people that there shall be no Christ, to interrupt their rejoicings? Why do ye speak against all the prophecies of the holy prophets?

໒໓ ບັດນີ້ຊື່ຂອງມະຫາປະໂລຫິດຜູ້ນັ້ນຄື ກິດໂດນາ. ແລະ ໂຄຣິ
ຫໍຕອບເພິ່ນວ່າ: ຍ້ອນວ່າຂ້າພະເຈົ້າບໍ່ໄດ້ສິດສອນຮີດຄອງ
ປະເພນີອັນໂງ່ຈ້າຫລ້າຫລັງຂອງບັນພະບຸລຸດຂອງທ່ານ, ແລະ
ຍ້ອນວ່າຂ້າພະເຈົ້າບໍ່ໄດ້ສິດສອນຜູ້ຄົນພວກນີ້ໃຫ້ຜູກມັດຕົວ
ເອງພາຍໃຕ້ພິທີການ ແລະ ການປະຕິບັດອັນໂງ່ຈ້າຫລ້າຫລັງ
ຊຶ່ງປະໂລຫິດສະໄໝບູຮານກຳນົດໄວ້ ເພື່ອແຍ້ງຊີງເອົາອຳນາດ
ແລະ ສິດອຳນາດປົກຄອງຂອງພວກເຂົາ, ເພື່ອເກັບກຳພວກ
ເຂົາໄວ້ໃນຄວາມໂງ່ຈ້າຫລ້າຫລັງ, ເພື່ອພວກເຂົາຈະບໍ່ໄດ້ເງີຍ
ໜ້າຂຶ້ນ, ແຕ່ຖືກນຳເອົາລົງໄປຕາມຄຳເວົ້າຂອງທ່ານ.

Now the high priest's name was Giddonah. And Korihor said unto him: Because I do not teach the foolish traditions of your fathers, and because I do not teach this people to bind themselves down under the foolish ordinances and performances which are laid down by ancient priests, to usurp power and authority over them, to keep them in ignorance, that they may not lift up their heads, but be brought down according to thy words.

໒໔ ທ່ານເວົ້າວ່າ ຜູ້ຄົນພວກນີ້ເປັນຄົນມີອິດສະລະ. ຈົ່ງເບິ່ງ,
ຂ້າພະເຈົ້າກ່າວວ່າ ພວກເຂົາຢູ່ໃນຄວາມເປັນທາດ. ທ່ານກ່າວ
ວ່າຄຳທຳນາຍເຫລົ່ານັ້ນຂອງສະໄໝບູຮານເປັນຄວາມຈິງ. ຈົ່ງ
ເບິ່ງ, ຂ້າພະເຈົ້າກ່າວວ່າ ທ່ານບໍ່ຮູ້ຈັກດອກວ່າ ມັນເປັນຄວາມ
ຈິງ.

Ye say that this people is a free people. Behold, I say they are in bondage. Ye say that those ancient prophecies are true. Behold, I say that ye do not know that they are true.

ທ່ານເວົ້າວ່າ ຜູ້ຄົນພວກນີ້ເປັນຄົນທີ່ມີຄວາມຜິດ ແລະ ຕົກ
ໄປເພາະການລ່ວງລະເມີດຂອງພໍ່ແມ່. ຈົ່ງເບິ່ງ, ຂ້າພະເຈົ້າກ່າວ
ว่าลูกจะบ่มีความผิดเพาะพ่แม่.

Ye say that this people is a guilty and a fallen people, because of the transgression of a parent. Behold, I say that a child is not guilty because of its parents.

ແລະ ທ່ານເວົ້າອີກว่า ພຣະຄຣິດຈະສະເດັດມา. ແຕ່ຈົ່ງເບິ່ງ,
ຂ້າພະເຈົ້າກ່າວກັບທ່ານว่า ທ່ານບໍ່ຮູ້ຈັກດອກว่า ມັນຈະມີ
ພຣະຄຣິດ. ແລະ ທ່ານເວົ້າว่า ພຣະອົງຈະຖືກປະຫານເພື່ອ
ບาบຂອງໂລກ—

And ye also say that Christ shall come. But behold, I say that ye do not know that there shall be a Christ. And ye say also that he shall be slain for the sins of the world—

ແລະ ທ່ານນຳພาผู้ຄົນพวกนี้ไปตามรีดคองปะเพมีอัน
โง่จ้าหล้าหลังของบันพะบุลุดของท่าน, และ ตามความ
ปาดถะหมาของท่านเอง; ແລະ ທ່ານເຮັດໃຫ້ພວກເຂົາຕ່ຳ
ຕ້ອຍລົງ, ເຖິງແມ່ນຄືກັບว่า ພວກເຂົາຢູ່ໃນຄວາມເປັນທาด,
ເພື່ອທ່ານຈະອີ່ມໜຳສຳລານດ້ວຍແຮງງານຈากມືຂອງພວກ
ເຂົາ, ເພື່ອພວກເຂົາຈະເງີຍໜ້າຂຶ້ນບໍ່ໄດ້ດ້ວຍຄວາມອົງອาด,
ແລະ ເພື່ອພວກເຂົາຈະບໍ່ກ້າຊົ່ນຊົ່ມໃນສິດ ແລະ ສິດທິພິເສດ
ຂອງພວກເຂົາ.

And thus ye lead away this people after the foolish traditions of your fathers, and according to your own desires; and ye keep them down, even as it were in bondage, that ye may glut yourselves with the labors of their hands, that they durst not look up with boldness, and that they durst not enjoy their rights and privileges.

ແທ້ຈິງແລ້ວ, ພວກເຂົາບໍ່ກ້າໃຊ້ສິ່ງທີ່ເປັນຂອງຕົນເອງ ໂດຍ
ຢ້ານว่าจะเรัดให้ปะโลหิดของพวกเขาบ่พ่ใจ, พวกเขา
ໄດ້ເປັນແອກໃຫ້ປະໂລຫິດຕາມຄວາມปาดถะหมาของ
ปะโลหิด, ແລະ ນຳພาพวกเขาให้เชื่อถือตามรีดคอง
ปะเพมีของตົນ, ຕາມຄວາມໄຝ່ຝັນຂອງຕົນ ແລະ ຕາມອาລົມ
ຂອງຕົນ ແລະ ພาบนิมิดนั้น, ແລະ ຄວາມລຶກລับທີ່ເຮັດຂຶ້ນมา
ຂອງຕົນ, ຖ້ຳหากพวกเขาบ่เรัดตามคำเว้าของตົນ, พวก
ເຂົາກໍເຮັດໃຫ້ຜູ້ໃດຜູ້ໜຶ່ງ ຊຶ່ງບໍ່ເປັນທີ່ຮູ້ຈັກຊຸ່ນເຄືອງ ຜູ້ຊຶ່ງ
ພວກເຂົາກ່າວว่า ເປັນພຣະເจ້ำ—ຊຶ່ງເປັນຜູ້ທີ່ບໍ່ເຄີຍຮູ້ ແລະ ບໍ່
ເຄີຍເຫັນ, ແລະ ເປັນຜູ້ທີ່ບໍ່ເຄີຍເປັນมาก่อน ແລະ ຈະບໍ່ມີວັນ
ເປັນໄປໄດ້.

Yea, they durst not make use of that which is their own lest they should offend their priests, who do yoke them according to their desires, and have brought them to believe, by their traditions and their dreams and their whims and their visions and their pretended mysteries, that they should, if they did not do according to their words, offend some unknown being, who they say is God—a being who never has been seen or known, who never was nor ever will be.

ບัดนี้เอลามะหาปะโลหิด ແລະ ຫົວໜ້ຳຜູ້ຕัดสินเห็น
ความแขงกะด้างของใจลาว, แท้จิงแล้ว, เมื่อพวกเพิ่น
ເຫັນລาวหมิ่นปะหมาดพระเจ้ำ, พวกเพิ่นจึ่งบ่ยอมตอบ
ຄຳເວົ້າຂອງລาว; ແຕ່ພວກເພິ່ນສັ່ງໃຫ້ມัดลาว; ແລະ ພວກ
ເພິ່ນໄດ້ສົ່ງລาวไปหาเจ้ำหน้ำที่ ແລະ ສົ່ງລาวต่ำไปหาแผ่น
ດິນເຊຣาเรัมลาเพื่อจะได้ນຳไปยู่ต่ำหน้ำของแอวมา ແລະ
ຫົວໜ້ຳຜູ້ຕัดสินซึ่งเป็นผู้ปิกคองแผ่นดินทั้งหมด.

Now when the high priest and the chief judge saw the hardness of his heart, yea, when they saw that he would revile even against God, they would not make any reply to his words; but they caused that he should be bound; and they delivered him up into the hands of the officers, and sent him to the land of Zarahemla, that he might be brought before Alma, and the chief judge who was governor over all the land.

ແລະ ເหตการณ์ได้บังเกิดขึ้นคือ ເວລาลาวถืกนำมายู่ต่ำหน้ำ
ແอวมา ແລະ ຫົວໜ້ຳຜູ້ຕัดสิน, ลาวก็เรัดแบบดงวกันกับ
ที่ลาวได้เรัดในแผ่นดินกิเดโอนนั้น; ແท้จิงแล้ว, ลาวได้
ໝິ່ນປะหมาดต็มอีก.

And it came to pass that when he was brought before Alma and the chief judge, he did go on in the same manner as he did in the land of Gideon; yea, he went on to blaspheme.

ມ໑ ແລະ ລາວໄດ້ໃຊ້ຄຳເວົ້າທີ່ ຮຸນແຮງຫລາຍຂຶ້ນຕໍ່ໜ້າແອວມາ, ແລະ ໝິ່ນປະໝາດພວກປະໂລຫິດ ແລະ ຜູ້ສິດສອນໂດຍກ່າວຫາວ່າພວກເພິ່ນໄດ້ຊັກນຳຜູ້ຄົນໃຫ້ເຮັດຕາມຮີດຄອງປະເພນີອັນໂງ່ຈ້າຫລ້າຫລັງຂອງບັນພະບຸລຸດຂອງຕົນ ເພື່ອເຫັນແກ່ຄວາມອີ່ມໜຳສຳລານຈາກແຮງງານຂອງປະຊາຊົນ.

ມ໒ ບັດນີ້ແອວມາໄດ້ກ່າວກັບລາວວ່າ: ເຈົ້າຮູ້ຢູ່ແລ້ວว่า ພວກເຮົາບໍ່ໄດ້ອີ່ມໜຳສຳລານຈາກແຮງງານຂອງຜູ້ຄົນພວກນີ້; ເພາະຈົ່ງເບິ່ງ ຂ້າພະເຈົ້າໄດ້ອອກແຮງງານຕັ້ງແຕ່ການເລີ່ມຕົ້ນຂອງການປົກຄອງຂອງຜູ້ຕັດສິນມາຈົນເຖິງບັດນີ້ດ້ວຍມືຂອງຂ້າພະເຈົ້າເອງເພື່ອຫາລ້ຽງຕົນເອງ, ທັງໆທີ່ຂ້າພະເຈົ້າໄດ້ເດີນທາງຫລາຍເທື່ອໄປມາທົ່ວແຜ່ນດິນເພື່ອປະກາດພຣະຄຳຂອງພຣະເຈົ້າແກ່ຜູ້ຄົນຂອງຂ້າພະເຈົ້າ.

ມ໓ ແລະ ທັງໆທີ່ມັນເປັນວຽກງານຢ່າງຫລວງຫລາຍ ຊຶ່ງຂ້າພະເຈົ້າໄດ້ເຮັດໄປໃນສາດສະໜາຈັກ, ຂ້າພະເຈົ້າກໍບໍ່ໄດ້ຮັບພຽງແຕ່ໜຶ່ງ ຊີໄນເພື່ອແຮງງານຂອງຂ້າພະເຈົ້າເລີຍ; ທັງພີ່ນ້ອງຂອງຂ້າພະເຈົ້າກໍບໍ່ໄດ້ຮັບຫຍັງເລີຍນອກຈາກເວລາທີ່ຢູ່ໃນບັນລັງຕັດສິນ; ແລະ ເມື່ອນັ້ນພວກເຮົາຈະໄດ້ຮັບຕາມກົດໝາຍສຳລັບເວລາຂອງພວກເຮົາເທົ່ານັ້ນ.

ມ໔ ແລະ ບັດນີ້, ຖ້າຫາກພວກເຮົາບໍ່ໄດ້ຮັບສິ່ງຕອບແທນແຮງງານຂອງພວກເຮົາໃນສາດສະໜາຈັກແລ້ວ, ມັນຈະເປັນປະໂຫຍດອັນໃດແກ່ພວກເຮົາທີ່ຈະເຮັດການໃນສາດສະໜາຈັກນອກຈາກເພື່ອປະກາດຄວາມຈິງ ເພື່ອພວກເຮົາຈະໄດ້ມີຄວາມປິຕິຍິນດີໃນ ຄວາມສຸກຂອງພີ່ນ້ອງຂອງພວກເຮົາ?

ມ໕ ແລ້ວເປັນຫຍັງເຈົ້າຈຶ່ງເວົ້າວ່າ ພວກເຮົາສັ່ງສອນຜູ້ຄົນພວກນີ້ເພື່ອຫາຜົນປະ�โຫຍດ, ໃນເມື່ອຕົວເຈົ້າເອງກໍຮູ້ຈັກຢູ່ແລ້ວว่า ພວກເຮົາບໍ່ໄດ້ຮັບຜົນປະໂຫຍດອັນໃດເລີຍ? ແລະ ບັດນີ້, ເຈົ້າເຊື່ອບໍວ່າ ພວກເຮົາຫລອກລວງຜູ້ຄົນພວກນີ້ ທີ່ເຮັດໃຫ້ພວກເຂົາມີຄວາມສຸກເຊັ່ນນີ້ໃນໃຈຂອງພວກເຂົາ?

ມ໖ ແລະ �โຄຣິຮໍຕອບເພິ່ນວ່າ, ຖືກແລ້ວ.

ມ໗ ແລະ ແລ້ວແອວມາຖາມລາວວ່າ: ເຈົ້າເຊື່ອບໍວ່າ ມັນມີພຣະເຈົ້າ?

ມ໘ ແລະ ລາວຕອບว่า, ບໍ່ເຊື່ອ.

ມ໙ ບັດນີ້ແອວມາເວົ້າກັບລາວວ່າ: ເຈົ້າຈະປະຕິເສດອີກບໍວ່າ ມັນບໍ່ມີພຣະເຈົ້າ, ແລະ ປະຕິເສດພຣະຄຣິດອີກບໍ? ເພາະຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບເຈົ້າว่า, ຂ້າພະເຈົ້າຮູ້ຈັກว่า ມັນມີພຣະເຈົ້າ ແລະ ว่าพระคริสต์จะสะเดัดมา.

ມ໑໐ ແລະ ບັດນີ້ເຈົ້າມີຫລັກຖານແນວໃດທີ່ว่ามันบ่มี พระเจ้า, ຫລື ว่าพระคริสต์จะบ่สะเดัดมา? ຂ້າພະເຈົ້າກ່າວว่า ເຈົ້າບໍ່ມີເລີຍ, ນອກຈາກຄຳເວົ້າຂອງເຈົ້າເທົ່ານັ້ນ.

And he did rise up in great swelling words before Alma, and did revile against the priests and teachers, accusing them of leading away the people after the silly traditions of their fathers, for the sake of glutting on the labors of the people.

Now Alma said unto him: Thou knowest that we do not glut ourselves upon the labors of this people; for behold I have labored even from the commencement of the reign of the judges until now, with mine own hands for my support, notwithstanding my many travels round about the land to declare the word of God unto my people.

And notwithstanding the many labors which I have performed in the church, I have never received so much as even one senine for my labor; neither has any of my brethren, save it were in the judgment-seat; and then we have received only according to law for our time.

And now, if we do not receive anything for our labors in the church, what doth it profit us to labor in the church save it were to declare the truth, that we may have rejoicings in the joy of our brethren?

Then why sayest thou that we preach unto this people to get gain, when thou, of thyself, knowest that we receive no gain? And now, believest thou that we deceive this people, that causes such joy in their hearts?

And Korihor answered him, Yea.

And then Alma said unto him: Believest thou that there is a God?

And he answered, Nay.

Now Alma said unto him: Will ye deny again that there is a God, and also deny the Christ? For behold, I say unto you, I know there is a God, and also that Christ shall come.

And now what evidence have ye that there is no God, or that Christ cometh not? I say unto you that ye have none, save it be your word only.

๔๑ ເພາະຈົ່ງເບິ່ງ, ຂ້າພະເຈົ້າມີທຸກສິ່ງທຸກຢ່າງທີ່ເປັນ ປະຈັກພະຍານວ່າສິ່ງເຫລົ່ານີ້ເປັນຄວາມຈິງ; ແລະ ເຈົ້າກໍມີທຸກສິ່ງທຸກຢ່າງທີ່ຈະໃຫ້ເປັນປະຈັກພະຍານວ່າ ສິ່ງເຫລົ່ານີ້ເປັນຄວາມຈິງ; ແລະ ເຈົ້າຈະປະຕິເສດມັນບໍ? ເຈົ້າເຊື່ອບໍວ່າ ສິ່ງເຫລົ່ານີ້ເປັນຄວາມຈິງ?

๓ ບັດນີ້, ພວກເຮົາເຫັນວ່າມະນຸດມາເປັນເໝືອນດັ່ງພຣະເຈົ້າ, ຮູ້ຄວາມດີ ແລະ ຄວາມຊົ່ວ; ເພື່ອເຂົາເຈົ້າຈະບໍ່ໄດ້ຍື່ນມືອອກໄປ ແລະ ປົດເອົາໝາກໄມ້ຈາກຕົ້ນໄມ້ແຫ່ງຊີວິດອີກ, ແລະ ກິນ ແລະ ມີຊີວິດຢູ່ຕະຫລອດການ, ອົງພຣະຜູ້ເປັນເຈົ້າຈຶ່ງໄດ້ວາງເຄ ຣູບິມກັບດາບທີ່ເປັນແປວໄຟໄວ້, ເພື່ອເຂົາເຈົ້າຈະບໍ່ໄດ້ກິນໝາກ ໄມ້ນັ້ນ—

๔ ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນ, ວ່າມັນມີເວລາທີ່ປະທານໃຫ້ ມະນຸດເພື່ອກັບໃຈ, ແທ້ຈິງແລ້ວ, ມັນມີ ເວລາແຫ່ງການ ທົດລອງ, ແມ່ນເວລາທີ່ຈະກັບໃຈ ແລະ ຮັບໃຊ້ພຣະເຈົ້າ.

๕ ເພາະຈົ່ງເບິ່ງ, ຖ້າຫາກອາດາມໄດ້ຍື່ນມືຂອງລາວອອກໄປ ທັນທີ ແລະ ປົດເອົາໝາກໄມ້ຈາກຕົ້ນໄມ້ແຫ່ງຊີວິດ, ລາວຈະມີ ຊີວິດຊົ່ວນິລັນດອນ, ຕາມພຣະຄຳຂອງພຣະເຈົ້າ, ຈະບໍ່ມີໄລຍະ ເວລາເພື່ອການກັບໃຈ; ແທ້ຈິງແລ້ວ, ແລະ ພຣະຄຳຂອງ ພຣະເຈົ້າຈະບໍ່ມີຄວາມໝາຍ, ແລະ ແຜນແຫ່ງຄວາມລອດອັນ ຍິ່ງໃຫຍ່ຈະລົ້ມເຫລວໄປ.

๖ ແຕ່ຈົ່ງເບິ່ງ, ມັນມີກຳນົດທີ່ຈະໃຫ້ມະນຸດ ຕາຍ—ສະນັ້ນ, ດັ່ງທີ່ເຂົາເຈົ້າໄດ້ຖືກຕັດອອກຈາກຕົ້ນໄມ້ແຫ່ງຊີວິດ ແລ້ວ ເຂົາເຈົ້າຈະຖືກຕັດອອກຈາກຜືນແຜ່ນດິນໂລກນຳອີກ—ແລະ ມະນຸດຈະຫລົງທາງຕະຫລອດໄປ, ແທ້ຈິງແລ້ວ, ເຂົາກາຍເປັນ ມະນຸດທີ່ ຕົກໄປ.

๗ ແລະ ບັດນີ້, ລູກເຫັນຈາກເລື່ອງນີ້ວ່າບິດາມານດາຜູ້ທຳອິດ ຂອງພວກເຮົາຖືກ ຕັດອອກຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ ທັງທາງໂລກ ແລະ ທາງວິນຍານແລ້ວ; ແລະ ພວກເຮົາຈຶ່ງເຫັນ ເຂົາເຈົ້າກາຍມາເປັນຄົນທີ່ຂຶ້ນຢູ່ກັບການກະທຳຕາມ ຄວາມ ປະສົງຂອງຕົນເອງດັ່ງນັ້ນ.

Alma 42

And now, my son, I perceive there is somewhat more which doth worry your mind, which ye cannot understand—which is concerning the justice of God in the punishment of the sinner; for ye do try to suppose that it is injustice that the sinner should be consigned to a state of misery.

Now behold, my son, I will explain this thing unto thee. For behold, after the Lord God sent our first parents forth from the garden of Eden, to till the ground, from whence they were taken—yea, he drew out the man, and he placed at the east end of the garden of Eden, cherubim, and a flaming sword which turned every way, to keep the tree of life—

Now, we see that the man had become as God, knowing good and evil; and lest he should put forth his hand, and take also of the tree of life, and eat and live forever, the Lord God placed cherubim and the flaming sword, that he should not partake of the fruit—

And thus we see, that there was a time granted unto man to repent, yea, a probationary time, a time to repent and serve God.

For behold, if Adam had put forth his hand immediately, and partaken of the tree of life, he would have lived forever, according to the word of God, having no space for repentance; yea, and also the word of God would have been void, and the great plan of salvation would have been frustrated.

But behold, it was appointed unto man to die—therefore, as they were cut off from the tree of life they should be cut off from the face of the earth—and man became lost forever, yea, they became fallen man.

And now, ye see by this that our first parents were cut off both temporally and spiritually from the presence of the Lord; and thus we see they became subjects to follow after their own will.

໘ ບັດນີ້ຈົ່ງເບິ່ງ, ມັນບໍ່ສົມຄວນທີ່ຈະກູ້ມະນຸດຄືນຈາກຄວາມ
ຕາຍທາງໂລກ, ເພາະມັນຈະທຳລາຍ ແຜນແຫ່ງຄວາມສຸກອັນ
ຍິ່ງໃຫຍ່.

Now behold, it was not expedient that man should be reclaimed from this temporal death, for that would destroy the great plan of happiness.

໙ ສະນັ້ນ, ຍ້ອນຈິດວິນຍານຕາຍບໍ່ໄດ້, ແລະ ການຕົກນຳເອົາ
ຄວາມຕາຍທັງທາງວິນຍານ ແລະ ທາງໂລກມາຫາມະນຸດຊາດ
ທັງປວງຄື, ພວກເຂົາຖືກຕັດອອກຈາກທີ່ປະທັບຂອງພຣະຜູ້
ເປັນເຈົ້າ, ມັນຈຶ່ງສົມຄວນທີ່ຈະກູ້ມະນຸດຊາດຄືນຈາກຄວາມ
ຕາຍທາງວິນຍານນີ້.

Therefore, as the soul could never die, and the fall had brought upon all mankind a spiritual death as well as a temporal, that is, they were cut off from the presence of the Lord, it was expedient that mankind should be reclaimed from this spiritual death.

໑໐ ສະນັ້ນ, ເມື່ອພວກເຂົາກາຍເປັນຄົນມີ ກາມມະລົມ, ຕັນຫາ
ໜ້າມືດ, ແລະ ຕ່ຳຊ້າ ໂດຍ ທຳມະຊາດ, ສະພາວະແຫ່ງການ
ທົດລອງນີ້ຈຶ່ງກັບເປັນສະພາບໃຫ້ພວກເຂົາຕຽມຕົວ; ມັນກັບ
ເປັນສະພາບເພື່ອການຕຽມຕົວ.

Therefore, as they had become carnal, sensual, and devilish, by nature, this probationary state became a state for them to prepare; it became a preparatory state.

໑໑ ແລະ ບັດນີ້ຈົ່ງຈຳໄວ້, ລູກຂອງພໍ່, ຖ້າຫາກບໍ່ແມ່ນເພາະ
ແຜນແຫ່ງການໄຖ່ (ຄືຖ້າບໍ່ມີ) ໃນທັນທີທີ່ພວກເຂົາຕາຍໄປ
ຈິດວິນຍານຂອງພວກເຂົາຍ່ອມ ເປັນທຸກ, ໂດຍທີ່ຖືກຕັດອອກ
ຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ.

And now remember, my son, if it were not for the plan of redemption, (laying it aside) as soon as they were dead their souls were miserable, being cut off from the presence of the Lord.

໑໒ ແລະ ບັດນີ້, ບໍ່ມີວິທີກູ້ມະນຸດຄືນຈາກສະພາບທີ່ຕົກນີ້, ຊຶ່ງ
ມະນຸດນຳມາໃຫ້ຕົວເອງ ເພາະຄວາມບໍ່ເຊື່ອຟັງຂອງເຂົາເອງ;

And now, there was no means to reclaim men from this fallen state, which man had brought upon himself because of his own disobedience;

໑໓ ສະນັ້ນ, ຕາມຄວາມຍຸດຕິທຳແລ້ວ, ແຜນແຫ່ງການໄຖ່ຈະ
ເກີດຂຶ້ນບໍ່ໄດ້, ເວັ້ນເສຍແຕ່ໂດຍເງື່ອນໄຂຂອງ ການກັບໃຈຂອງ
ມະນຸດໃນສະພາບແຫ່ງການທົດລອງນີ້, ແທ້ຈິງແລ້ວ,
ສະພາວະແຫ່ງການທົດລອງນີ້; ເພາະຖ້າຫາກມັນບໍ່ເປັນໄປ
ຕາມເງື່ອນໄຂເຫລົ່ານີ້, ຄວາມເມດຕາຈະເກີດຜົນບໍ່ໄດ້ເວັ້ນເສຍ
ແຕ່ຈະທຳລາຍວຽກງານແຫ່ງຄວາມຍຸດຕິທຳເສຍ. ບັດນີ້
ວຽກງານແຫ່ງຄວາມຍຸດຕິທຳຈະຖືກທຳລາຍບໍ່ໄດ້; ຖ້າຫາກ
ເປັນເຊັ່ນນັ້ນ, ພຣະເຈົ້າກໍຈະ ເລີກເປັນພຣະເຈົ້າ.

Therefore, according to justice, the plan of redemption could not be brought about, only on conditions of repentance of men in this probationary state, yea, this preparatory state; for except it were for these conditions, mercy could not take effect except it should destroy the work of justice. Now the work of justice could not be destroyed; if so, God would cease to be God.

໑໔ ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າມະນຸດຊາດທັງປວງ ຕົກ
ແລ້ວ, ແລະ ພວກເຂົາຢູ່ໃນກຳມືແຫ່ງ ຄວາມຍຸດຕິທຳ; ແທ້ຈິງ
ແລ້ວ, ຄວາມຍຸດຕິທຳຂອງພຣະເຈົ້າ, ຊຶ່ງສົ່ງພວກເຂົາໄປໃຫ້ຖືກ
ຕັດອອກຈາກທີ່ປະທັບຂອງພຣະອົງຕະຫລອດການ.

And thus we see that all mankind were fallen, and they were in the grasp of justice; yea, the justice of God, which consigned them forever to be cut off from his presence.

໑໕ ແລະ ບັດນີ້, ແຜນແຫ່ງຄວາມເມດຕາຈະເກີດຂຶ້ນບໍ່ໄດ້ຖ້າ
ຫາກບໍ່ມີການຊົດໃຊ້ເກີດຂຶ້ນ; ສະນັ້ນ ພຣະເຈົ້າເອງຈຶ່ງ ຊົດໃຊ້
ແທນບາບຂອງໂລກ, ເພື່ອນຳແຜນແຫ່ງ ຄວາມເມດຕາມາ,
ເພື່ອໃຫ້ພຽງພໍແກ່ຂໍ້ຮຽກຮ້ອງຂອງ ຄວາມຍຸດຕິທຳ, ເພື່ອ
ພຣະເຈົ້າຈະເປັນພຣະເຈົ້າ ທີ່ດີພ້ອມ, ທ່ຽງທຳ, ແລະ ເປັນ
ພຣະເຈົ້າຜູ້ເມດຕານຳອີກ.

And now, the plan of mercy could not be brought about except an atonement should be made; therefore God himself atoneth for the sins of the world, to bring about the plan of mercy, to appease the demands of justice, that God might be a perfect, just God, and a merciful God also.

໑໖ ບັດນີ້, ການກັບໃຈຈະມາສູ່ມະນຸດບໍ່ໄດ້ຖ້າຫາກບໍ່ມີການ
ລົງໂທດ, ຊຶ່ງເປັນ ນິລັນດອນດັ່ງຊີວິດຂອງຈິດວິນຍານຈະເປັນ,
ໂດຍຕັ້ງໄວ້ກົງກັນຂ້າມກັບແຜນແຫ່ງຄວາມສຸກ, ຊຶ່ງເປັນ
ນິລັນດອນດັ່ງຊີວິດຂອງຈິດວິນຍານນຳອີກ.

Now, repentance could not come unto men except there were a punishment, which also was eternal as the life of the soul should be, affixed opposite to the plan of happiness, which was as eternal also as the life of the soul.

ບັດນີ້, ມະນຸດຈະກັບໃຈໄດ້ແນວໃດຖ້າຫາກເຂົາບໍ່ໄດ້ເຮັດ
ບາບ? ເຂົາຈະເຮັດບາບໄດ້ແນວໃດຖ້າຫາກບໍ່ມີ ກົດ? ກົດຈະມີ
ໄດ້ແນວໃດຖ້າຫາກບໍ່ມີການລົງ�โทດ?

ບັດນີ້, ມີການລົງโทດຕັ້ງໄວ້, ແລະ ມີກົດທີ່ຫ່ຽງທຳຕັ້ງໄວ້,
ຊຶ່ງນຳຄວາມເສຍໃຈໃນ ຈິດສຳນຶກມາຫາມະນຸດ.

ບັດນີ້, ຖ້າຫາກບໍ່ມີກົດໃຫ້ໄວ້—ຖ້າຫາກມະນຸດກະທຳ
ຄາດຕະກຳ ເຂົາກໍຄວນຕາຍ—ເຂົາຈະຢ້ານບໍ່ວ່າ ເຂົາຈະຕາຍຖ້າ
ເຂົາກະທຳຄາດຕະກຳ?

ແລະ ຖ້າຫາກບໍ່ມີກົດໃຫ້ໄວ້ເພື່ອຫ້າມການເຮັດບາບ ມະນຸດ
ຈະບໍ່ຢ້ານທີ່ຈະເຮັດບາບເລີຍ.

ແລະ ຖ້າຫາກມັນ ບໍ່ມີກົດໃຫ້ໄວ້, ຖ້າຫາກມະນຸດເຮັດບາບ
ຄວາມຍຸດຕິທຳ ແລະ ຄວາມເມດຕາ ຈະເຮັດຫຍັງໄດ້, ເພາະ
ທັງສອງຢ່າງນີ້ຈະບໍ່ມີສິດທິເໜືອກວ່າມະນຸດ?

ແຕ່ມີກົດໃຫ້ໄວ້, ແລະ ມີການລົງโทດຕັ້ງໄວ້ ແລະ ໃຫ້ມີ ການ
ກັບໃຈ, ຊຶ່ງການກັບໃຈນີ້ ຄວາມເມດຕາມີສິດທິ; ບໍ່ດັ່ງນັ້ນ,
ຄວາມຍຸດຕິທຳຈະມີສິດເໜືອກວ່າມະນຸດ ແລະ ບັງຄັບກົດ,
ແລະ ກົດເຮັດໃຫ້ມີການລົງโทດ; ຖ້າຫາກບໍ່ດັ່ງນັ້ນ, ວຽກງານ
ແຫ່ງຄວາມຍຸດຕິທຳຈະຖືກທຳລາຍ, ແລະ ພຣະເຈົ້າກໍຈະເລີກ
ເປັນພຣະເຈົ້າ.

ແຕ່ພຣະເຈົ້າຈະບໍ່ເລີກເປັນພຣະເຈົ້າ, ແລະ ຄວາມເມດຕາມີ
ສິດທິໃນຜູ້ທີ່ສຳນຶກຜິດ, ແລະ ຄວາມເມດຕາເກີດຂຶ້ນເພາະ
ການຊົດໃຊ້; ແລະ ການຊົດໃຊ້ເຮັດໃຫ້ເກີດ ການຟື້ນຄືນຊີວິດ
ຂອງຄົນຕາຍ; ແລະ ການຟື້ນຄືນຊີວິດຂອງຄົນຕາຍນຳມະນຸດ
ກັບມາຫາທີ່ປະທັບຂອງພຣະເຈົ້າ; ແລະ ຄົນທັງຫລາຍຈຶ່ງຖືກ
ນຳກັບຄືນຫາທີ່ປະທັບຂອງພຣະອົງ, ເພື່ອຈະຖືກ ພິພາກສາ
ຕາມວຽກງານຂອງພວກເຂົາ, ອັນເປັນໄປຕາມກົດແຫ່ງຄວາມ
ຍຸດຕິທຳ.

ເພາະຈົ່ງເບິ່ງ, ຄວາມຍຸດຕິທຳປະຕິບັດຂໍ້ຮຽກຮ້ອງທັງໝົດ
ຂອງມັນ, ແລະ ຄວາມເມດຕາມີສິດທິໃນທຸກຢ່າງທີ່ເປັນຂອງ
ມັນເອງ; ແລະ ດ້ວຍປະການນີ້, ມັນຈຶ່ງບໍ່ມີຜູ້ໃດລອດ ນອກຈາກ
ຄົນທີ່ສຳນຶກຜິດຢ່າງແທ້ຈິງ.

ລູກຄິດວ່າຄວາມເມດຕາຂະໂມຍ ຄວາມຍຸດຕິທຳໄດ້ບໍ? ພໍ່ເວົ້າ
ກັບລູກວ່າ, ບໍ່ໄດ້; ບໍ່ໄດ້ເລີຍແມ່ນແຕ່ໜ້ອຍດຽວ. ຖ້າຫາກເປັນ
ເຊັ່ນນັ້ນ, ພຣະເຈົ້າກໍຈະເລີກເປັນພຣະເຈົ້າແລ້ວ.

ແລະ ດ້ວຍເຫດນີ້ ພຣະເຈົ້າຈຶ່ງນຳ ຈຸດປະສົງອັນເປັນ
ນິລັນດອນຂອງພຣະອົງມາ, ຊຶ່ງໄດ້ຕຽມໄວ້ ນັບຕັ້ງແຕ່ການວາງ
ຮາກຖານຂອງໂລກ. ແລະ ດ້ວຍເຫດນີ້ ມັນຈຶ່ງເກີດມີຄວາມ
ລອດ ແລະ ການໄຖ່ຂອງມະນຸດ, ແລະ ຄວາມພິນາດ, ແລະ
ຄວາມທຸກທໍລະມານຂອງເຂົານຳອີກ.

Now, how could a man repent except he should sin? How could he sin if there was no law? How could there be a law save there was a punishment?

Now, there was a punishment affixed, and a just law given, which brought remorse of conscience unto man.

Now, if there was no law given—if a man murdered he should die—would he be afraid he would die if he should murder?

And also, if there was no law given against sin men would not be afraid to sin.

And if there was no law given, if men sinned what could justice do, or mercy either, for they would have no claim upon the creature?

But there is a law given, and a punishment affixed, and a repentance granted; which repentance, mercy claimeth; otherwise, justice claimeth the creature and executeth the law, and the law inflicteth the punishment; if not so, the works of justice would be destroyed, and God would cease to be God.

But God ceaseth not to be God, and mercy claimeth the penitent, and mercy cometh because of the atonement; and the atonement bringeth to pass the resurrection of the dead; and the resurrection of the dead bringeth back men into the presence of God; and thus they are restored into his presence, to be judged according to their works, according to the law and justice.

For behold, justice exerciseth all his demands, and also mercy claimeth all which is her own; and thus, none but the truly penitent are saved.

What, do ye suppose that mercy can rob justice? I say unto you, Nay; not one whit. If so, God would cease to be God.

And thus God bringeth about his great and eternal purposes, which were prepared from the foundation of the world. And thus cometh about the salvation and the redemption of men, and also their destruction and misery.

Therefore, O my son, whosoever will come may come and partake of the waters of life freely; and whosoever will not come the same is not compelled to come; but in the last day it shall be restored unto him according to his deeds.

If he has desired to do evil, and has not repented in his days, behold, evil shall be done unto him, according to the restoration of God.

And now, my son, I desire that ye should let these things trouble you no more, and only let your sins trouble you, with that trouble which shall bring you down unto repentance.

O my son, I desire that ye should deny the justice of God no more. Do not endeavor to excuse yourself in the least point because of your sins, by denying the justice of God; but do you let the justice of God, and his mercy, and his long-suffering have full sway in your heart; and let it bring you down to the dust in humility.

And now, O my son, ye are called of God to preach the word unto this people. And now, my son, go thy way, declare the word with truth and soberness, that thou mayest bring souls unto repentance, that the great plan of mercy may have claim upon them. And may God grant unto you even according to my words. Amen.

ສະນັ້ນ, ໂອ້ ລູກຂອງພໍ່, ຜູ້ໃດກໍຕາມທີ່ຈະມາ ກໍຈະມາໄດ້ ແລະ ດື່ມນ້ຳແຫ່ງຊີວິດຢ່າງມີອິດສະລະ; ແລະ ຜູ້ໃດກໍຕາມທີ່ຈະບໍ່ມາ ຜູ້ນັ້ນກໍຈະບໍ່ຖືກບັງຄັບໃຫ້ມາ; ແຕ່ໃນວັນສຸດທ້າຍ ສິ່ງທີ່ເຂົາໄດ້ ກະທຳໄວ້ຈະ ກັບຄືນມາຫາເຂົາ.

ຖ້າຫາກເຂົາປາດຖະໜາຈະສ້າງ ຄວາມຊົ່ວ, ແລະ ບໍ່ກັບໃຈ ໃນວັນເວລາຂອງເຂົາ, ຈົ່ງເບິ່ງ, ຄວາມຊົ່ວຈະເກີດກັບເຂົາ, ຊຶ່ງ ເປັນຕາມການນຳກັບຄືນມາຂອງພຣະເຈົ້າ.

ແລະ ບັດນີ້, ລູກຂອງພໍ່, ພໍ່ບໍ່ຢາກໃຫ້ສິ່ງເຫລົ່ານີ້ເປັນທີ່ ກັງວົນໃຈຕໍ່ລູກອີກຕໍ່ໄປ, ແລະ ຂໍໃຫ້ບາບຂອງລູກເທົ່ານັ້ນເປັນ ສິ່ງທີ່ກັງວົນໃຈລູກ, ດ້ວຍຄວາມກັງວົນນັ້ນ ມັນຈະນຳລູກລົງມາ ສູ່ການກັບໃຈ.

ໂອ້ ລູກຂອງພໍ່, ພໍ່ປາດຖະໜາວ່າ ລູກຈະບໍ່ປະຕິເສດຄວາມ ຍຸດຕິທຳຂອງພຣະເຈົ້າອີກຕໍ່ໄປ. ຈົ່ງຢ່າພະຍາຍາມແກ້ຄວາມ ຜິດເພາະບາບຂອງລູກ, ໂດຍປະຕິເສດຄວາມຍຸດຕິທຳຂອງ ພຣະເຈົ້າ; ແຕ່ລູກຈົ່ງຍອມໃຫ້ຄວາມຍຸດຕິທຳຂອງພຣະເຈົ້າ, ແລະ ພຣະເມດຕາຂອງພຣະອົງ, ແລະ ຄວາມອົດກັ້ນຂອງ ພຣະອົງມີອິດທິພົນຢ່າງເຕັມທີ່ຢູ່ໃນໃຈຂອງລູກ; ຂໍໃຫ້ມັນນຳ ລູກລົງມາຕ່ຳຢູ່ກັບຝຸ່ນດິນໃນ ຄວາມຖ່ອມຕົວ.

ແລະ ບັດນີ້, ໂອ້ ລູກຂອງພໍ່, ລູກໄດ້ຮັບການເອີ້ນຈາກ ພຣະເຈົ້າໃຫ້ສັ່ງສອນພຣະຄຳແກ່ຜູ້ຄົນພວກນີ້. ແລະ ບັດນີ້, ລູກຂອງພໍ່, ຈົ່ງໄປເຖີດ, ຈົ່ງປະກາດພຣະຄຳດ້ວຍຄວາມຈິງ ແລະ ດ້ວຍຄວາມມີສະຕິ, ເພື່ອລູກຈະໄດ້ນຳຈິດວິນຍານ ທັງຫລາຍມາສູ່ການກັບໃຈ, ເພື່ອແຜນແຫ່ງຄວາມເມດຕາອັນ ຍິ່ງໃຫຍ່ຈະມີສິດທິເໜືອກວ່າພວກເຂົາ. ແລະ ຂໍໃຫ້ພຣະເຈົ້າຈົ່ງ ໂປດປະທານພອນໃຫ້ລູກຈົນວ່າມັນເປັນໄປຕາມຄຳເວົ້າຂອງພໍ່ ດ້ວຍເຖີດ. ອາແມນ.

ແອວມາ ๔๓

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ພວກລູກຊາຍຂອງແອວ
ມາໄດ້ອອກໄປໃນບັນດາຜູ້ຄົນ, ເພື່ອປະກາດພຣະຄຳແກ່ພວກ
ເຂົາ. ແລະ ແອວມາເອງກໍໄດ້ອອກໄປຢ່າງບໍ່ໄດ້ພັກຜ່ອນເລີຍ.

๒ ບັດນີ້ພວກເຮົາຈະບໍ່ກ່າວເຖິງການສັ່ງສອນຂອງເຂົາເຈົ້າຕໍ່ໄປ
ອີກ, ນອກຈາກວ່າເຂົາເຈົ້າໄດ້ສັ່ງສອນພຣະຄຳ ແລະ ຄວາມຈິງ
ຕາມວິນຍານແຫ່ງການທຳນາຍ ແລະ ການເປີດເຜີຍ; ແລະ
ເຂົາເຈົ້າໄດ້ສັ່ງສອນຕາມ ລະບຽບອັນສັກສິດຂອງພຣະເຈົ້າຜູ້ໄດ້
ເອີ້ນເຂົາເຈົ້າ.

๓ ແລະ ບັດນີ້ຂ້າພະເຈົ້າຈະກັບມາເວົ້າກ່ຽວກັບສົງຄາມລະ
ຫว่ાງຊາວນີໄຟ ແລະ ຊາວເລມັນໃນປີທີສິບແປດແຫ່ງການ
ປົກຄອງຂອງຜູ້ຕັດສິນ.

๔ ເພາະຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນຄື ຊາວໂຊຣຳໄດ້
ກາຍເປັນຊາວເລມັນ; ສະນັ້ນ, ໃນຕົ້ນປີທີສິບແປດນີ້ ຜູ້ຄົນຂອງ
ນີໄຟໄດ້ເຫັນວ່າຊາວເລມັນກຳລັງຈະມາໂຈມຕີພວກເຂົາ;
ສະນັ້ນ ພວກເຂົາຈົ່ງໄດ້ຕຽມເພື່ອສົງຄາມ; ແທ້ຈິງແລ້ວ, ພວກ
ເຂົາໄດ້ເຕົ້າໂຮມເອົາກອງທັບຂອງພວກເຂົາທີ່ຢູ່ໃນແຜ່ນດິນເຈີ
ຊອນ.

๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນໄດ້ຍົກກອງທັບ
ທະຫານມາເປັນຈຳນວນຫລາຍພັນຄົນ; ແລະ ພວກເຂົາໄດ້ຍົກ
ກອງທັບເຂົ້າມາໃນແຜ່ນດິນອານທີໂອນຳ, ຊຶ່ງເປັນແຜ່ນດິນ
ຂອງຊາວໂຊຣຳ; ແລະ ຜູ້ນຳກອງທັບຂອງພວກເຂົາມີຊື່ວ່າ
ເຊຣາເຮັມນາ.

๖ ແລະ ບັດນີ້, ໂດຍທີ່ຊາວອາມາລະໄຄເປັນຄົນຊົ່ວ ແລະ ມັກ
ຂ້າຄົນຫລາຍກວ່າຊາວເລມັນ, ສະນັ້ນ, ເຊຣາເຮັມນາຈົ່ງໄດ້
ແຕ່ງຕັ້ງຫົວໜ້ານາຍທະຫານຂຶ້ນເພື່ອດູແລຊາວເລມັນ, ຊຶ່ງ
ພວກຫົວໜ້າເຫລົ່ານັ້ນເປັນຊາວອາມາລະໄຄ ແລະ ຊາວໂຊຣຳ.

๗ ບັດນີ້ລາວໄດ້ເຮັດແບບນີ້ເພື່ອວ່າລາວຈະໄດ້ເກັບກຳຄວາມ
ຄຽດແຄ້ນຂອງພວກເຂົາທີ່ມີຕໍ່ຊາວນີໄຟໄວ້, ເພື່ອລາວຈະໄດ້
ເອົາຄົນເຫລົ່ານັ້ນມາຢູ່ພາຍໃຕ້ການປົກຄອງຕາມແຜນການ
ຂອງລາວ.

๘ ເພາະຈົ່ງເບິ່ງ, ແຜນການຂອງລາວຄື ຍຸແຍ່ໃຫ້ຊາວເລມັນ
ຄຽດແຄ້ນໃຫ້ຊາວນີໄຟ; ລາວເຮັດແບບນີ້ເພື່ອວ່າລາວຈະໄດ້
ແຍ້ງຊີງເອົາອຳນາດເພື່ອປົກຄອງຄົນເຫລົ່ານັ້ນ, ແລະ ເພື່ອວ່າ
ລາວຈະໄດ້ມີອຳນາດປົກຄອງຊາວນີໄຟ ໂດຍເອົາພວກເຂົາ
ເຫລົ່ານັ້ນມາເປັນທາດນຳອີກ.

Alma 43

And now it came to pass that the sons of Alma did go forth among the people, to declare the word unto them. And Alma, also, himself, could not rest, and he also went forth.

Now we shall say no more concerning their preaching, except that they preached the word, and the truth, according to the spirit of prophecy and revelation; and they preached after the holy order of God by which they were called.

And now I return to an account of the wars between the Nephites and the Lamanites, in the eighteenth year of the reign of the judges.

For behold, it came to pass that the Zoramites became Lamanites; therefore, in the commencement of the eighteenth year the people of the Nephites saw that the Lamanites were coming upon them; therefore they made preparations for war; yea, they gathered together their armies in the land of Jershon.

And it came to pass that the Lamanites came with their thousands; and they came into the land of Antionum, which is the land of the Zoramites; and a man by the name of Zerahemnah was their leader.

And now, as the Amalekites were of a more wicked and murderous disposition than the Lamanites were, in and of themselves, therefore, Zerahemnah appointed chief captains over the Lamanites, and they were all Amalekites and Zoramites.

Now this he did that he might preserve their hatred towards the Nephites, that he might bring them into subjection to the accomplishment of his designs.

For behold, his designs were to stir up the Lamanites to anger against the Nephites; this he did that he might usurp great power over them, and also that he might gain power over the Nephites by bringing them into bondage.

ດ ແລະ ບັດນີ້ແຜນການຂອງຊາວນີໄຟນັ້ນແມ່ນ ການປົກປັກຮັກສາແຜ່ນດິນຂອງພວກເຂົາ, ແລະ ບ້ານເຮືອນຂອງພວກເຂົາ, ແລະ ເມຍຂອງພວກເຂົາ, ແລະ ລູກຂອງພວກເຂົາ, ເພື່ອພວກເຂົາຈະໄດ້ປົກປັກຮັກສາສິ່ງເຫລົ່ານີ້ໃຫ້ພົ້ນຈາກກຳມືຂອງສັດຕູຂອງພວກເຂົາ; ແລະ ເພື່ອພວກເຂົາຈະໄດ້ຮັກສາສິດ ແລະ ສິດທິພິເສດຂອງພວກເຂົານຳອີກ, ແທ້ຈິງແລ້ວ, ເສລີພາບຂອງພວກເຂົານຳອີກ, ເພື່ອພວກເຂົາຈະໄດ້ນະມັດສະການພຣະເຈົ້າຕາມຄວາມປາດຖະໜາຂອງຕົນ.

And now the design of the Nephites was to support their lands, and their houses, and their wives, and their children, that they might preserve them from the hands of their enemies; and also that they might preserve their rights and their privileges, yea, and also their liberty, that they might worship God according to their desires.

໑໐ ເພາະພວກເຂົາຮູ້ວ່າ ຖ້າຫາກພວກເຂົາຕົກຢູ່ໃນກຳມືຂອງຊາວເລມັນແລ້ວ, ຄືຊາວເລມັນຈະທຳລາຍຜູ້ໃດກໍຕາມທີ່ນະມັດສະການພຣະເຈົ້າໃນ ວິນຍານ ແລະ ໃນຄວາມຈິງ, ຊຶ່ງເປັນພຣະເຈົ້າທີ່ທ່ຽງແທ້ ແລະ ຊົງພຣະຊົນຢູ່.

For they knew that if they should fall into the hands of the Lamanites, that whosoever should worship God in spirit and in truth, the true and the living God, the Lamanites would destroy.

໑໑ ແທ້ຈິງແລ້ວ, ແລະ ພວກເຂົາຮູ້ຈັກເຖິງຄວາມກຽດຊັງອັນຍິ່ງໃຫຍ່ຂອງຊາວເລມັນທີ່ມີຕໍ່ ພີ່ນ້ອງຂອງພວກເຂົາ, ຜູ້ຊຶ່ງເປັນຜູ້ຄົນຂອງອານໄທ-ນີໄຟ-ລີໄຮ, ຊຶ່ງມີຊື່ວ່າຜູ້ຄົນຂອງອຳໂມນ—ແລະ ຜູ້ຄົນເຫລົ່ານີ້ບໍ່ຍອມຈັບອາວຸດ, ແທ້ຈິງແລ້ວ, ພວກເຂົາໄດ້ເຂົ້າຢູ່ໃນພັນທະສັນຍາ ແລະ ພວກເຂົາຈະບໍ່ລະເມີດ—ສະນັ້ນ, ຖ້າຫາກພວກເຂົາຕົກຢູ່ໃນກຳມືຂອງຊາວເລມັນ, ພວກເຂົາກໍຈະຖືກທຳລາຍ.

Yea, and they also knew the extreme hatred of the Lamanites towards their brethren, who were the people of Anti-Nephi-Lehi, who were called the people of Ammon—and they would not take up arms, yea, they had entered into a covenant and they would not break it—therefore, if they should fall into the hands of the Lamanites they would be destroyed.

໑໒ ແລະ ຊາວນີໄຟບໍ່ຍອມໃຫ້ພວກເຂົາຖືກທຳລາຍ; ສະນັ້ນ ຊາວນີໄຟຈຶ່ງໄດ້ມອບແຜ່ນດິນໃຫ້ພວກເຂົາເພື່ອເປັນມູນມໍລະດົກ.

And the Nephites would not suffer that they should be destroyed; therefore they gave them lands for their inheritance.

໑໓ ແລະ ຜູ້ຄົນຂອງອຳໂມນໄດ້ມອບເຂົ້າຂອງຢ່າງຫລວງຫລາຍຂອງຕົນໃຫ້ແກ່ຊາວນີໄຟ ເພື່ອອູ້ມຊູກອງທັບຂອງພວກເຂົາ; ແລະ ດັ່ງນັ້ນ ຊາວນີໄຟຈຶ່ງຖືກບັງຄັບໃຫ້ຕ້ານທານຊາວເລມັນ ແຕ່ຝ່າຍດຽວ, ຊຶ່ງເປັນເຊື້ອສາຍຂອງເລມັນ ແລະ ເລມູເອນ, ແລະ ພວກລູກຫລານຂອງອິດຊະມາເອນ, ແລະ ຄົນທັງໝົດທີ່ໄດ້ແຍກອອກໄປຈາກຊາວນີໄຟຄື ຊາວອາມາລະໄຄ, ຊາວໂຊຣຳ, ແລະ ເຊື້ອສາຍຂອງພວກປະໂລຫິດຂອງກະສັດໂນອາຄົນນັ້ນ.

And the people of Ammon did give unto the Nephites a large portion of their substance to support their armies; and thus the Nephites were compelled, alone, to withstand against the Lamanites, who were a compound of Laman and Lemuel, and the sons of Ishmael, and all those who had dissented from the Nephites, who were Amalekites and Zoramites, and the descendants of the priests of Noah.

໑໔ ບັດນີ້ຜູ້ສືບເຊື້ອສາຍເຫລົ່ານີ້ມີຈຳນວນຫລວງຫລາຍເກືອບເທົ່າກັບຊາວນີໄຟ; ແລະ ສະນັ້ນຊາວນີໄຟຈຶ່ງຖືກບັງຄັບໃຫ້ຕໍ່ສູ້ກັບພີ່ນ້ອງຂອງຕົນດັ່ງນີ້, ຈົນກະທັ່ງມີການນອງເລືອດເກີດຂຶ້ນ.

Now those descendants were as numerous, nearly, as were the Nephites; and thus the Nephites were obliged to contend with their brethren, even unto bloodshed.

໑໕ ແລະ ເຫດການໄດ້ບັງເກີດຂຶ້ນ ໃນຂະນະທີ່ກອງທັບຂອງຊາວເລມັນມາເຕົ້າໂຮມກັນຢູ່ໃນແຜ່ນດິນອານທິໂອນຳ, ຈົ່ງເບິ່ງ, ກອງທັບຂອງຊາວນີໄຟພ້ອມແລ້ວທີ່ຈະພົບກັບພວກເຂົາໃນແຜ່ນດິນເຈີຊອນ.

And it came to pass as the armies of the Lamanites had gathered together in the land of Antionum, behold, the armies of the Nephites were prepared to meet them in the land of Jershon.

Now, the leader of the Nephites, or the man who had been appointed to be the chief captain over the Nephites—now the chief captain took the command of all the armies of the Nephites—and his name was Moroni;

And Moroni took all the command, and the government of their wars. And he was only twenty and five years old when he was appointed chief captain over the armies of the Nephites.

And it came to pass that he met the Lamanites in the borders of Jershon, and his people were armed with swords, and with cimeters, and all manner of weapons of war.

And when the armies of the Lamanites saw that the people of Nephi, or that Moroni, had prepared his people with breastplates and with arm-shields, yea, and also shields to defend their heads, and also they were dressed with thick clothing—

Now the army of Zerahemnah was not prepared with any such thing; they had only their swords and their cimeters, their bows and their arrows, their stones and their slings; and they were naked, save it were a skin which was girded about their loins; yea, all were naked, save it were the Zoramites and the Amalekites;

But they were not armed with breastplates, nor shields—therefore, they were exceedingly afraid of the armies of the Nephites because of their armor, notwithstanding their number being so much greater than the Nephites.

Behold, now it came to pass that they durst not come against the Nephites in the borders of Jershon; therefore they departed out of the land of Antionum into the wilderness, and took their journey round about in the wilderness, away by the head of the river Sidon, that they might come into the land of Manti and take possession of the land; for they did not suppose that the armies of Moroni would know whither they had gone.

ບັດນີ້, ຜູ້ນຳຂອງຊາວນີໄຟ ຫລື ຜູ້ຖືກແຕ່ງຕັ້ງໃຫ້ເປັນ ຫົວໜ້ານາຍທະຫານຂອງຊາວນີໄຟ—ບັດນີ້ຫົວໜ້ານາຍ ທະຫານຜູ້ນີ້ເປັນຜູ້ບັງຄັບບັນຊາກອງທັບທັງໝົດຂອງຊາວນີ ໄຟ—ແລະ ຊື່ຂອງເພີ່ນຄື ໂມໂຣໄນ;

ແລະ ໂມໂຣໄນໄດ້ຮັບຕຳແໜ່ງໃຫ້ເປັນຜູ້ບັງຄັບບັນຊາ ທັງໝົດ ແລະ ພ້ອມກັບການປົກຄອງກ່ຽວກັບສົງຄາມ. ແລະ ເພີ່ນມີອາຍຸພຽງແຕ່ຊາວຫ້າປີເທົ່ານັ້ນຕອນເພີ່ນຖືກແຕ່ງຕັ້ງ ໃຫ້ເປັນຫົວໜ້ານາຍທະຫານຂອງກອງທັບຊາວນີໄຟ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ເພີ່ນໄດ້ພົບກັບຊາວເລມັນ ທີ່ຊາຍແດນເຈີຊອນ, ແລະ ພວກທະຫານຂອງເພີ່ນໄດ້ຖືຫອກ, ແລະ ດາບ, ແລະ ອາວຸດແຫ່ງສົງຄາມທຸກຊະນິດ.

ແລະ ເມື່ອກອງທັບຊາວເລມັນເຫັນວ່າຜູ້ຄົນຂອງນີໄຟ ຫລື ວ່າໂມໂຣໄນຕຽມກອງທະຫານຂອງເພີ່ນໄວ້ພ້ອມດ້ວຍແຜ່ນ ປົກເອິກ ແລະ ພ້ອມດ້ວຍເຄື່ອງປ້ອງກັນແຂນ, ແທ້ຈິງແລ້ວ, ພ້ອມທັງເຄື່ອງປ້ອງກັນຫົວຂອງພວກເຂົານຳອີກ, ແລະ ພວກ ເຂົານຸ່ງຫົ່ມເສື້ອຜ້າໜາ—

ບັດນີ້ກອງທັບຂອງເຊຣາເຮັມນາບໍ່ໄດ້ມີການຕຽມສິ່ງເຫລົ່າ ນີ້ເລີຍ; ພວກເຂົາມີພຽງແຕ່ຫອກ ແລະ ດາບ, ແລະ ຄັນທະນູ ແລະ ລູກທະນູ, ແລະ ມີກ້ອນຫີນກັບກະຖຸນຂອງພວກເຂົາ; ແລະ ຕົນຕົວຂອງພວກເຂົາ ເປືອຍເປົ່າ, ນອກຈາກແຜ່ນໜັງ ຄຽນແອວເທົ່ານັ້ນ; ແທ້ຈິງແລ້ວ, ຕົນຕົວຂອງພວກເຂົາທຸກຄົນ ເປືອຍເປົ່າໝົດ, ເວັ້ນເສຍແຕ່ຊາວໂຊຣໍາ ແລະ ຊາວອາມາລະໄຄ ເທົ່ານັ້ນ;

ແຕ່ພວກເຂົາບໍ່ມີແຜ່ນປົກເອິກ ຫລື ໂລ່—ສະນັ້ນ, ພວກເຂົາ ຈຶ່ງມີຄວາມຢ້ານກົວກອງທັບຂອງຊາວນີໄຟຫລາຍທີ່ສຸດ ເພາະວ່າເຄື່ອງນຸ່ງຂອງພວກນີໄຟ, ທັງໆທີ່ຈຳນວນຄົນຂອງ ພວກເຂົາມີຫລາຍກວ່າຊາວນີໄຟຕັ້ງຫລາຍເທົ່າ.

ຈົ່ງເບິ່ງ, ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາບໍ່ກ້າມາສູ້ ຮົບກັບຊາວນີໄຟທີ່ຊາຍແດນເຈີຊອນເລີຍ; ສະນັ້ນພວກເຂົາຈຶ່ງ ໄດ້ອອກໄປຈາກແຜ່ນດິນອານທີໂອນຳ ແລະ ເຂົ້າໄປໃນຖິ່ນ ແຫ້ງແລ້ງກັນດານໃກ້ຫົວແມ່ນ້ຳຊີໂດນ, ເພື່ອພວກເຂົາຈະໄດ້ ເຂົ້າໄປຫາແຜ່ນດິນແມນທາຍ ແລະ ຍຶດເອົາຫົວເມືອງ; ເພາະ ພວກເຂົາບໍ່ຄິດວ່າກອງທັບຂອງໂມໂຣໄນຮູ້ຈັກແລ້ວວ່າ ພວກ ເຂົາໄດ້ໄປທາງໃດ.

But it came to pass, as soon as they had departed into the wilderness Moroni sent spies into the wilderness to watch their camp; and Moroni, also, knowing of the prophecies of Alma, sent certain men unto him, desiring him that he should inquire of the Lord whither the armies of the Nephites should go to defend themselves against the Lamanites.

And it came to pass that the word of the Lord came unto Alma, and Alma informed the messengers of Moroni, that the armies of the Lamanites were marching round about in the wilderness, that they might come over into the land of Manti, that they might commence an attack upon the weaker part of the people. And those messengers went and delivered the message unto Moroni.

Now Moroni, leaving a part of his army in the land of Jershon, lest by any means a part of the Lamanites should come into that land and take possession of the city, took the remaining part of his army and marched over into the land of Manti.

And he caused that all the people in that quarter of the land should gather themselves together to battle against the Lamanites, to defend their lands and their country, their rights and their liberties; therefore they were prepared against the time of the coming of the Lamanites.

And it came to pass that Moroni caused that his army should be secreted in the valley which was near the bank of the river Sidon, which was on the west of the river Sidon in the wilderness.

And Moroni placed spies round about, that he might know when the camp of the Lamanites should come.

And now, as Moroni knew the intention of the Lamanites, that it was their intention to destroy their brethren, or to subject them and bring them into bondage that they might establish a kingdom unto themselves over all the land;

ແຕ່ເຫດການໄດ້ບັງເກີດຂຶ້ນ, ໃນທັນທີທີ່ພວກເຂົາເຂົ້າໄປໃນ
ຖິ່ນແຫ້ງແລ້ງກັນດານ ໂມໂຣໄນກໍໄດ້ສົ່ງນັກສືບເຂົ້າໄປໃນຖິ່ນ
ແຫ້ງແລ້ງກັນດານເພື່ອຕິດຕາມເບິ່ງຄ້າຍພັກຂອງພວກເຂົາ;
ແລະ ໂມໂຣໄນໂດຍທີ່ຮູ້ຈັກເຖິງການທຳນາຍຂອງແອວມາ, ຈຶ່ງ
ໄດ້ສົ່ງຄົນຈຳນວນໜຶ່ງໄປຫາເພີ່ນ, ໂດຍປາດຖະໜາຈະໃຫ້
ເພີ່ນທູນຖາມພຣະຜູ້ເປັນເຈົ້າວ່າ ກອງທັບຂອງຊາວນີໄຟຄວນ
ຈະໄປສູ້ຮົບກັບຊາວເລມັນ ຢູ່ບ່ອນໃດເພື່ອປົກປ້ອງຕົວເອງ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະຄຳຂອງພຣະຜູ້ເປັນ
ເຈົ້າໄດ້ມາເຖິງແອວມາ, ແລະ ແອວມາໄດ້ບອກຂ່າວແກ່ພວກສົ່ງ
ສານຂອງໂມໂຣໄນວ່າ ກອງທັບຂອງຊາວເລມັນກຳລັງຍົກທັບ
ເດີນເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ ເພື່ອຈະໄດ້ຂ້າມມາຫາ
ແຜ່ນດິນແມນທາຍ, ເພື່ອຈະໄດ້ເລີ່ມໂຈມຕີຜູ້ຄົນທີ່ອ່ອນແອ
ກວ່າພວກເຂົາ. ແລະ ພວກສົ່ງສານໄດ້ໄປແຈ້ງຕໍ່ໂມໂຣໄນ.

ບັດນີ້ໂມໂຣໄນ, ຈຶ່ງໄດ້ໃຫ້ກອງທັບສ່ວນໜຶ່ງຂອງເພີ່ນຄຸ້ມ
ກັນຢູ່ໃນແຜ່ນດິນເຈີຊອນ, ເພາະຢ້ານວ່າໂດຍວິທີໃດວິທີໜຶ່ງ
ຊາວເລມັນບາງຈຳນວນອາດຈະເຂົ້າມາຍຶດເອົາແຜ່ນດິນນັ້ນ
ແລະ ເຂົ້າເປັນເຈົ້າຂອງ, ຈຶ່ງໄດ້ຍົກກອງທັບສ່ວນທີ່ເຫລືອຢູ່
ຂອງເພີ່ນ ແລະ ຂ້າມໄປຫາແຜ່ນດິນແມນທາຍ.

ແລະ ເພີ່ນໄດ້ສັ່ງໃຫ້ຜູ້ຄົນທັງໝົດໃນແຜ່ນດິນສ່ວນນັ້ນມາ
ເຕົ້າໂຮມກັນເພື່ອຈະໄດ້ຕໍ່ສູ້ກັບຊາວເລມັນ, ເພື່ອ ປົກປ້ອງ
ແຜ່ນດິນ ແລະ ປະເທດຊາດຂອງພວກເຂົາ, ແລະ ສິດທິ ແລະ
ເສລີພາບຂອງພວກເຂົາ; ສະນັ້ນ ຜູ້ຄົນຈຶ່ງໄດ້ຕຽມພ້ອມຢູ່
ສະເໝີທີ່ຈະຕໍ່ສູ້ກັບຊາວເລມັນເມື່ອເວລາພວກເຂົາເຂົ້າມາ
ໂຈມຕີ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນໄດ້ສັ່ງໃຫ້ກອງທັບ
ຂອງເພີ່ນໄປລີ້ຖ້າຢູ່ໃນຮ່ອມພູ ຊຶ່ງຢູ່ໃກ້ກັບຝັ່ງແມ່ນ້ຳຊີໂດນ,
ຊຶ່ງມັນຢູ່ທາງຕາເວັນຕົກຂອງແມ່ນ້ຳຊີໂດນ ໃນຖິ່ນແຫ້ງແລ້ງ
ກັນດານ.

ແລະ ໂມໂຣໄນໄດ້ວາງຄົນສອດແນມໄວ້ໂດຍຮອບ, ເພື່ອເພີ່ນ
ຈະໄດ້ຮູ້ຈັກว່ າເວລາໃດຄ້າຍຂອງຊາວເລມັນຈະມາຕັ້ງຂຶ້ນ.

ແລະ ບັດນີ້, ໂມໂຣໄນຮູ້ຈັກເຈດຕະນາຂອງຊາວເລມັນ, ว່ າ
ພວກເຂົາຢາກຈະທຳລາຍພີ່ນ້ອງຂອງຕົນ, ຫລື ເພື່ອຈະໄດ້ນຳ
ເອົາພວກເຂົາມາຂຶ້ນກັບພວກເຂົາ ແລະ ເອົາພວກເຂົາເຫລົ່ານັ້ນ
ມາເປັນທາດ ເພື່ອພວກເຂົາເອງຈະໄດ້ສະຖາປະນາອານາຈັກ
ຂອງຕົນຂຶ້ນ ເພື່ອພວກເຂົາຈະໄດ້ປົກຄອງທົ່ວແຜ່ນດິນ;

ມ໑໐ ແລະ ໂດຍທີ່ເພິ່ນໄດ້ຮູ້ຈັກອີກວ່າ ຄວາມປາດຖະໜາຢ່າງດຽວຂອງຊາວນີໄຟນັ້ນຄື ເພື່ອປົກປັກຮັກສາແຜ່ນດິນຂອງພວກເຂົາ, ແລະ ເສລີພາບຂອງພວກເຂົາ, ແລະ ສາດສະໜາຈັກຂອງພວກເຂົາ, ສະນັ້ນເພິ່ນຈຶ່ງຄິດວ່າມັນບໍ່ເປັນການກະທຳບາບທີ່ເພິ່ນຈະປ້ອງກັນຊາວນີໄຟດ້ວຍກົນອຸບາຍ; ສະນັ້ນ, ເພິ່ນຈຶ່ງຮູ້ຈັກໂດຍຄົນສອດແນມຂອງເພິ່ນວ່າ ຊາວເລມັນຈະໄປທາງໃດ.

And he also knowing that it was the only desire of the Nephites to preserve their lands, and their liberty, and their church, therefore he thought it no sin that he should defend them by stratagem; therefore, he found by his spies which course the Lamanites were to take.

ມ໑໑ ສະນັ້ນ, ເພິ່ນຈຶ່ງໄດ້ແບ່ງກອງທັບຂອງເພິ່ນ ແລະ ໄດ້ນຳເອົາສ່ວນໜຶ່ງໄປໃນຮ່ອມພູ, ແລະ ລີ້ຢູ່ທາງຕາເວັນອອກ ແລະ ທາງໃຕ້ຂອງເນີນພູຣິບລາ;

Therefore, he divided his army and brought a part over into the valley, and concealed them on the east, and on the south of the hill Riplah;

ມ໑໒ ແລະ ສ່ວນທີ່ເຫລືອນັ້ນ ເພິ່ນໄດ້ໃຫ້ລີ້ຢູ່ໃນຮ່ອມພູທາງຕາເວັນຕົກຂອງແມ່ນ້ຳຊີໂດນ, ຈົນສຸດຊາຍແດນຂອງແຜ່ນດິນແມນທາຍ.

And the remainder he concealed in the west valley, on the west of the river Sidon, and so down into the borders of the land Manti.

ມ໑ມ ເມື່ອເພິ່ນໄດ້ຈັດວາງກອງທັບຂອງເພິ່ນໄວ້ຕາມຄວາມປາດຖະໜາຂອງເພິ່ນຮຽບຮ້ອຍແລ້ວ, ເພິ່ນກໍພ້ອມແລ້ວທີ່ຈະພົບກັບພວກເຂົາ.

And thus having placed his army according to his desire, he was prepared to meet them.

ມ໑ໜ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນໄດ້ຍົກກອງທັບມາທາງເໜືອຂອງເນີນພູ, ຊຶ່ງກອງທັບສ່ວນໜຶ່ງຂອງໂມໂຣໄນໄດ້ລີ້ຖ້າຢູ່ແລ້ວ.

And it came to pass that the Lamanites came up on the north of the hill, where a part of the army of Moroni was concealed.

ມ໑ສ ແລະ ເວລາທີ່ຊາວເລມັນຜ່ານເນີນພູຣິບລາ, ແລະ ມາຮອດຮ່ອມພູ, ແລະ ກຳລັງຈະຂ້າມແມ່ນ້ຳຊີໂດນຢູ່ນັ້ນ, ກອງທັບທີ່ລີ້ຖ້າຢູ່ທາງໃຕ້ຂອງເນີນພູ ຊຶ່ງນຳໂດຍຄົນຜູ້ໜຶ່ງຊື່ວ່າ ລີໄຮ, ແລະ ລາວໄດ້ນຳເອົາກອງທັບຂອງລາວອອກມາ ແລະ ລ້ອມຊາວເລມັນໄວ້ທາງຕາເວັນອອກທາງດ້ານຫລັງ.

And as the Lamanites had passed the hill Riplah, and came into the valley, and began to cross the river Sidon, the army which was concealed on the south of the hill, which was led by a man whose name was Lehi, and he led his army forth and encircled the Lamanites about on the east in their rear.

ມ໑ຜ ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາຊາວເລມັນເຫັນກອງທັບຊາວນີໄຟເຂົ້າໂຈມຕີຂ້າງຫລັງ, ພວກເຂົາຈຶ່ງໄດ້ຫັນກັບຄືນໄປ ແລະ ເລີ່ມຕໍ່ສູ້ກັບກອງທັບຂອງລີໄຮ.

And it came to pass that the Lamanites, when they saw the Nephites coming upon them in their rear, turned them about and began to contend with the army of Lehi.

ມ໑໑ ແລະ ການຕາຍໄດ້ທະວີຂຶ້ນທັງສອງຝ່າຍ, ແຕ່ວ່າການຕາຍຂອງຝ່າຍຊາວເລມັນເປັນໜ້າຢ້ານກົວຫລາຍທີ່ສຸດ, ເພາະວ່າຄວາມເປືອຍເປົ່າຂອງພວກເຂົາທີ່ຮັບການຟັນຢ່າງໜັກຂອງຊາວນີໄຟດ້ວຍດາບ ແລະ ຖືກແທງດ້ວຍຫອກ, ຄືທຸກເທື່ອທີ່ໄດ້ຟັນລົງໄປຕ້ອງໄດ້ຂ້າເກືອບທຸກເທື່ອ.

And the work of death commenced on both sides, but it was more dreadful on the part of the Lamanites, for their nakedness was exposed to the heavy blows of the Nephites with their swords and their cimeters, which brought death almost at every stroke.

While on the other hand, there was now and then a man fell among the Nephites, by their swords and the loss of blood, they being shielded from the more vital parts of the body, or the more vital parts of the body being shielded from the strokes of the Lamanites, by their breastplates, and their armshields, and their head-plates; and thus the Nephites did carry on the work of death among the Lamanites.

And it came to pass that the Lamanites became frightened, because of the great destruction among them, even until they began to flee towards the river Sidon.

And they were pursued by Lehi and his men; and they were driven by Lehi into the waters of Sidon, and they crossed the waters of Sidon. And Lehi retained his armies upon the bank of the river Sidon that they should not cross.

And it came to pass that Moroni and his army met the Lamanites in the valley, on the other side of the river Sidon, and began to fall upon them and to slay them.

And the Lamanites did flee again before them, towards the land of Manti; and they were met again by the armies of Moroni.

Now in this case the Lamanites did fight exceedingly; yea, never had the Lamanites been known to fight with such exceedingly great strength and courage, no, not even from the beginning.

And they were inspired by the Zoramites and the Amalekites, who were their chief captains and leaders, and by Zerahemnah, who was their chief captain, or their chief leader and commander; yea, they did fight like dragons, and many of the Nephites were slain by their hands, yea, for they did smite in two many of their head-plates, and they did pierce many of their breastplates, and they did smite off many of their arms; and thus the Lamanites did smite in their fierce anger.

ນ້ຽ ສ່ວນໃນບັນດາຊາວນີໄຟນັ້ນ, ດົນໆຈຶ່ງຕາຍຄົນໜຶ່ງດ້ວຍດາບ ແລະ ດ້ວຍການເສຍເລືອດ, ໂດຍທີ່ພວກເຂົາມີເຄື່ອງປ້ອງກັນພາກສ່ວນສຳຄັນຂອງຮ່າງກາຍ, ແລະ ພາກສ່ວນສຳຄັນທີ່ສຸດຂອງຮ່າງກາຍກໍມີເຄື່ອງປ້ອງກັນໃຫ້ພົ້ນຈາກການຟັນຂອງຊາວເລມັນ, ໂດຍມີ ແຜ່ນປົກເອິກ ແລະ ເຄື່ອງປ້ອງກັນແຂນ ແລະ ປ້ອງກັນຫົວຂອງພວກເຂົາ; ດ້ວຍເຫດນີ້ ຊາວນີໄຟຈຶ່ງໄດ້ຂ້າຊາວເລມັນຢ່າງຫລວງຫລາຍ.

ນ້ຍ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນມີຄວາມຢ້ານກົວຫລາຍ, ເພາະຄວາມພິນາດອັນໃຫຍ່ຫລວງໃນບັນດາພວກເຂົາ, ຈົນວ່າພວກເຂົາໄດ້ເລີ່ມປົບໜີໄປທາງແມ່ນ້ຳຊີໂດນ.

ຄ໐ ແລະ ພວກເຂົາຖືກລີໄຮ ແລະ ທະຫານຂອງລາວໄລ່ຕິດຕາມໄປ; ແລະ ພວກເຂົາຖືກລີໄຮໄລ່ລົງໄປໃນນ້ຳຊີໂດນ ແລະ ພວກເຂົາໄດ້ຂ້າມນ້ຳຊີໂດນໄປ. ແລະ ລີໄຮສັ່ງໃຫ້ກອງທັບຂອງລາວຢຸດທີ່ຝັ່ງແມ່ນ້ຳຊີໂດນບໍ່ໃຫ້ຂ້າມໄປ.

ຄ໑ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນ ແລະ ກອງທັບຂອງເພີ່ນໄດ້ພົບກັບຊາວເລມັນໃນຮ່ອມພູທາງຝັ່ງແມ່ນ້ຳຊີໂດນເບື້ອງນັ້ນ ແລະ ເລີ່ມໂຈມຕີ ແລະ ຂ້າຟັນພວກເຂົາ.

ຄ໒ ແລະ ຊາວເລມັນໄດ້ປົບໜີໄປທາງໜ້າຂອງພວກເຂົາ, ໄປທາງແຜ່ນດິນແມນທາຍ; ແລະ ພວກເຂົາໄດ້ພົບກັບກອງທັບຂອງໂມໂຣໄນອີກ.

ຄ໓ ບັດນີ້ເມື່ອເປັນດັ່ງນີ້ແລ້ວ ຊາວເລມັນຈຶ່ງໄດ້ຕໍ່ສູ້ຈົນສຸດກຳລັງ; ແທ້ຈິງແລ້ວ, ມັນບໍ່ເຄີຍມີຈັກເທື່ອທີ່ຊາວເລມັນຈະຕໍ່ສູ້ດ້ວຍກຳລັງ ແລະ ດ້ວຍຄວາມກ້າຫານອັນໃຫຍ່ຫລວງພຽງນີ້, ບໍ່ມີຈັກເທື່ອ, ບໍ່ເຄີຍມີເລີຍຕັ້ງແຕ່ຕົ້ນ.

ຄ໔ ແລະ ພວກເຂົາໄດ້ຮັບກຳລັງໃຈຈາກ ຊາວໂຊຣຳ ແລະ ຊາວອາມາລະໄຄ, ຜູ້ທີ່ເປັນນາຍທະຫານຊັ້ນຫົວໜ້າ ແລະ ຜູ້ນຳຂອງພວກເຂົາ, ແລະ ຈາກເຊຣາເຮັມນາ ຜູ້ເປັນຫົວໜ້າທະຫານ ຫລື ຫົວໜ້າຜູ້ນຳ ແລະ ຜູ້ບັງຄັບບັນຊາຂອງພວກເຂົາ; ແທ້ຈິງແລ້ວ, ພວກເຂົາໄດ້ຕໍ່ສູ້ຄືກັນກັບມັງກອນ, ແລະ ຊາວນີໄຟຫລາຍຄົນໄດ້ຖືກຂ້າຕາຍດ້ວຍມືຂອງພວກເຂົາ, ແທ້ຈິງແລ້ວ, ເພາະວ່າພວກເຂົາໄດ້ຟັນເຄື່ອງປ້ອງກັນຫົວເປັນຈຳນວນຫລວງຫລາຍຂອງຊາວນີໄຟຂາດ ອອກເປັນສອງຕ່ອນ, ແລະ ພວກເຂົາໄດ້ແທງແຜ່ນປົກເອິກ ຂອງຊາວນີໄຟຊອດ, ແລະ ພວກເຂົາໄດ້ຟັນແຂນຂອງຊາວນີໄຟ ຂາດຫລາຍແຂນ, ແລະ ຊາວເລມັນໄດ້ຟັນລົງດ້ວຍຄວາມຄຽດ ແຄ້ນທີ່ສຸດຂອງພວກເຂົາ.

ຄ.ຄ ເຖິງຢ່າງໃດກໍຕາມ, ຊາວນີໄຟຍັງໄດ້ຮັບກຳລັງໃຈດ້ວຍ ອຸດົມການທີ່ດີກວ່າ, ເພາະວ່າພວກເຂົາບໍ່ໄດ້ ຕໍ່ສູ້ເພື່ອກະສັດ ຫລື ວ່າເພື່ອອຳນາດໃດໆ ແຕ່ພວກເຂົາໄດ້ຕໍ່ສູ້ເພື່ອບ້ານເຮືອນ ຂອງພວກເຂົາ ແລະ ເພື່ອ ເສລີພາບຂອງພວກເຂົາ, ແລະ ເພື່ອ ເມຍຂອງພວກເຂົາ ແລະ ເພື່ອລູກຂອງພວກເຂົາ, ແລະ ເພື່ອ ທຸກສິ່ງທຸກຢ່າງຂອງພວກເຂົາ, ແທ້ຈິງແລ້ວ, ເພື່ອພິທີການ ແຫ່ງການນະມັດສະການ ແລະ ເພື່ອສາດສະໜາຈັກຂອງພວກ ເຂົານຳອີກ.

Nevertheless, the Nephites were inspired by a better cause, for they were not fighting for monarchy nor power but they were fighting for their homes and their liberties, their wives and their children, and their all, yea, for their rites of worship and their church.

ຄ.ຈ ແລະ ພວກເຂົາໄດ້ເຮັດທຸກສິ່ງທຸກຢ່າງທີ່ພວກເຂົາຮູ້ວ່າ ອັນໃດເປັນ ໜ້າທີ່ ຊຶ່ງພວກເຂົາໄດ້ເປັນໜີ້ພຣະເຈົ້າຂອງພວກ ເຂົາຢູ່; ເພາະວ່າພຣະຜູ້ເປັນເຈົ້າໄດ້ກ່າວກັບພວກເຂົາ ແລະ ບັນພະບຸລຸດຂອງພວກເຂົານຳອີກว່າ: ຕາບໃດທີ່ເຈົ້າບໍ່ມີຄວາມ ຜິດຍ້ອນການຮຸກຮານເທື່ອ ທຳອິດ, ຫລື ເທື່ອທີສອງ, ຕາບນັ້ນ ເຮົາຈະບໍ່ຍອມໃຫ້ເຈົ້າຖືກຂ້າດ້ວຍມືສັດຕູຂອງເຈົ້າ.

And they were doing that which they felt was the duty which they owed to their God; for the Lord had said unto them, and also unto their fathers, that: Inasmuch as ye are not guilty of the first offense, neither the second, ye shall not suffer yourselves to be slain by the hands of your enemies.

ຄ.ສ ແລະ ອີກເທື່ອໜຶ່ງ, ພຣະຜູ້ເປັນເຈົ້າໄດ້ກ່າວว່າ: ເຈົ້າຈົ່ງ ປ້ອງກັນຄອບຄົວຂອງເຈົ້າ ຈົນເຖິງການນອງເລືອດ. ສະນັ້ນ ຍ້ອນว່າອຸດົມການອັນນີ້ ຊາວນີໄຟຈຶ່ງມີກຳລັງໃຈຕໍ່ສູ້ກັບຊາວເລ ມັນ ເພື່ອປ້ອງກັນຕົວເອງ, ແລະ ຄອບຄົວຂອງພວກເຂົາ, ແລະ ແຜ່ນດິນຂອງພວກເຂົາ, ແລະ ປະເທດຊາດຂອງພວກເຂົາ, ແລະ ສິດທິຂອງພວກເຂົາ, ແລະ ສາດສະໜາຂອງພວກເຂົາ.

And again, the Lord has said that: Ye shall defend your families even unto bloodshed. Therefore for this cause were the Nephites contending with the Lamanites, to defend themselves, and their families, and their lands, their country, and their rights, and their religion.

ຄ.ຊ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອຄົນຂອງโมโรไนได้ ເຫັນຄວາມເປັນໜ້າຢ້ານກົວ ແລະ ຄວາມຄຽດແຄ້ນຂອງຊາວ ເລມັນ ພວກເຂົາກໍເກືອບຈະປົບໜີໄປຈາກພວກນັ້ນ. ແລະ ໂມ โรไนโดยที่เห็นเจตตะนาของพวกเขา ຈຶ່ງໄດ້ອອກຄຳສັ່ງ ໂດຍໃຫ້ກຳລັງໃຈພວກເຂົາດ້ວຍຄວາມຄິດດັ່ງນີ້—ແທ້ຈິງແລ້ວ, ຄວາມຄິດເຖິງແຜ່ນດິນຂອງພວກເຂົາ, ເສລີພາບຂອງພວກ ເຂົາ, ແທ້ຈິງແລ້ວ, ອິດສະລະພາບຂອງພວກເຂົາຈາກຄວາມ ເປັນທາດ.

And it came to pass that when the men of Moroni saw the fierceness and the anger of the Lamanites, they were about to shrink and flee from them. And Moroni, perceiving their intent, sent forth and inspired their hearts with these thoughts—yea, the thoughts of their lands, their liberty, yea, their freedom from bondage.

ຄ.ດ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຫັນກັບຄືນໄປ ຕໍ່ສູ້ກັບຊາວເລມັນ, ແລະ ພວກເຂົາໄດ້ ຮ້ອງອອກມາເພື່ອທູນຂໍ ຕໍ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາເປັນສຽງ ດຽວກັນ, ເພື່ອເສລີພາບຂອງພວກເຂົາ ແລະ ເພື່ອອິດສະລະ ພາບຂອງພວກເຂົາຈາກຄວາມເປັນທາດ.

And it came to pass that they turned upon the Lamanites, and they cried with one voice unto the Lord their God, for their liberty and their freedom from bondage.

ຄ.ເ ແລະ ພວກເຂົາເລີ່ມຢືນຕໍ່ສູ້ກັບຊາວເລມັນດ້ວຍພະລັງ; ແລະ ໃນຕອນທີ່ພວກເຂົາກຳລັງຮ້ອງທູນຂໍຕໍ່ພຣະຜູ້ເປັນເຈົ້າເພື່ອ ອິດສະລະພາບຂອງຕົນຢູ່ນັ້ນ, ຊາວເລມັນກໍເລີ່ມຖອຍໜີໄປຕໍ່ ໜ້າຂອງພວກເຂົາ; ແລະ ພວກເຂົາໄດ້ໜີໄປຈົນເຖິງແມ່ນ້ຳ ຊີโดน.

And they began to stand against the Lamanites with power; and in that selfsame hour that they cried unto the Lord for their freedom, the Lamanites began to flee before them; and they fled even to the waters of Sidon.

ບັດນີ້, ຊາວເລມັນມີຈຳນວນຫລາຍກວ່າ, ແທ້ຈິງແລ້ວ, ຫລາຍກວ່າຕັ້ງສອງເທົ່າຂອງຈຳນວນຂອງຊາວນີໄຟ; ປານນັ້ນ, ພວກເຂົາຍັງຖືກໄລ່ເຖິງຂະໜາດທີ່ພວກເຂົາຕ້ອງໄປເຕົ້າໂຮມກັນເປັນກອງດຽວຢູ່ໃນຮ່ອມພູເທິງຝັ່ງແມ່ນ້ຳຊີໂດນ.

ສະນັ້ນກອງທັບຂອງໂມໂຣໄນຈຶ່ງອ້ອມພວກເຂົາໄວ້ທັງສອງຝັ່ງແມ່ນ້ຳ, ຈົ່ງເບິ່ງ, ທາງຕາເວັນອອກກໍມີຄົນຂອງລີໄຮເຕັມຢູ່.

ສະນັ້ນ ເວລາເຊຣາເຮັມນາເຫັນຄົນຂອງລີໄຮຢູ່ທາງຕາເວັນອອກຂອງແມ່ນ້ຳຊີໂດນ, ແລະ ກອງທັບຂອງໂມໂຣໄນຢູ່ທາງຕາເວັນຕົກຂອງແມ່ນ້ຳຊີໂດນ, ແລະ ເຫັນວ່າເຂົາຖືກຊາວນີໄຟລ້ອມ ກໍເກີດມີຄວາມຢ້ານກົວ ແລະ ຕົກໃຈຫລາຍຂຶ້ນ.

ບັດນີ້ໂມໂຣໄນ, ເມື່ອເຫັນຄວາມຢ້ານກົວຂອງຊາວເລມັນ, ແລ້ວເພີ່ນກໍສັ່ງໃຫ້ຄົນຂອງເພີ່ນຢຸດການຂ້າຟັນລົງ.

Now, the Lamanites were more numerous, yea, by more than double the number of the Nephites; nevertheless, they were driven insomuch that they were gathered together in one body in the valley, upon the bank by the river Sidon.

Therefore the armies of Moroni encircled them about, yea, even on both sides of the river, for behold, on the east were the men of Lehi.

Therefore when Zerahemnah saw the men of Lehi on the east of the river Sidon, and the armies of Moroni on the west of the river Sidon, that they were encircled about by the Nephites, they were struck with terror.

Now Moroni, when he saw their terror, commanded his men that they should stop shedding their blood.

ແອວມາ ๔๔

๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຢຸດ ແລະ ຖອຍ
ອອກຫ່າງຈາກພວກເຂົາ. ແລະ ໂມໂຣໄນໄດ້ເວົ້າກັບເຊຣາເຮັມ
ນາວ່າ: ຈົ່ງເບິ່ງ, ເຊຣາເຮັມນາ, ຂ້າພະເຈົ້າ ບໍ່ແມ່ນຄົນກະຫາຍ
ເລືອດ. ທ່ານຢູ່ໃນກຳມືຂອງຂ້າພະເຈົ້າແລ້ວ, ແຕ່ວ່າຂ້າພະເຈົ້າບໍ່
ປາດຖະໜາທີ່ຈະຂ້າທ່ານ.

๒ ຈົ່ງເບິ່ງ, ພວກເຮົາບໍ່ໄດ້ອອກມາສູ້ຮົບກັບທ່ານ ເພື່ອຈະເຮັດ
ໃຫ້ທ່ານເລືອດຕົກຢາງອອກໂດຍຫວັງອຳນາດ; ທັງພວກເຮົາບໍ່
ປາດຖະໜາຈະເອົາໃຜມາສູ່ແອກແຫ່ງຄວາມເປັນທາດ. ແຕ່ນີ້ຄື
ສາເຫດອັນແທ້ຈິງທີ່ທ່ານມາສູ້ຮົບກັບພວກເຮົາ; ແທ້ຈິງແລ້ວ,
ທ່ານຄຽດແຄ້ນໃຫ້ພວກເຮົາເພາະສາດສະໜາຂອງພວກເຮົາ.

๓ ແຕ່ບັດນີ້, ທ່ານເຫັນແລ້ວວ່າ ພຣະຜູ້ເປັນເຈົ້າສະຖິດຢູ່ກັບ
ພວກເຮົາ ແລະ ທ່ານເຫັນແລ້ວວ່າພຣະອົງສົ່ງຕົວທ່ານມາຢູ່ໃນ
ກຳມືຂອງພວກເຮົາ. ແລະ ບັດນີ້ຂ້າພະເຈົ້າຢາກໃຫ້ທ່ານເຂົ້າໃຈ
ວ່າ ມັນເປັນໄປແນວນີ້ກັບພວກເຮົາ ເພາະສາດສະໜາ ແລະ
ສັດທາຂອງພວກເຮົາໃນພຣະຄຣິດ. ແລະ ບັດນີ້ທ່ານເຫັນແລ້ວ
ວ່າ ທ່ານທຳລາຍສັດທາຂອງພວກເຮົາບໍ່ໄດ້.

๔ ບັດນີ້ທ່ານເຫັນແລ້ວວ່າ ນີ້ຄືສັດທາທີ່ແທ້ຈິງຂອງພວກເຮົາ
ທີ່ມີຕໍ່ພຣະເຈົ້າ; ແທ້ຈິງແລ້ວ, ທ່ານເຫັນວ່າພຣະເຈົ້າອູ້ມຊູ ແລະ
ປົກປັກຮັກສາ ແລະ ປ້ອງກັນພວກເຮົາ, ຕາບໃດທີ່ພວກເຮົາ
ຊື່ສັດຕໍ່ພຣະອົງ, ຕໍ່ສັດທາຂອງພວກເຮົາ, ແລະ ຕໍ່ສາດສະໜາ
ຂອງພວກເຮົາ; ພຣະຜູ້ເປັນເຈົ້າຈະບໍ່ຍອມໃຫ້ພວກເຮົາຖືກ
ທຳລາຍເລີຍ ຖ້າຫາກພວກເຮົາບໍ່ໄດ້ຕົກໄປສູ່ການລ່ວງລະເມີດ
ແລະ ປະຕິເສດສັດທາຂອງພວກເຮົາ.

๕ ແລະ ບັດນີ້, ເຊຣາເຮັມນາ, ຂ້າພະເຈົ້າບັນຊາທ່ານ, ໃນພຣະ
ນາມຂອງພຣະເຈົ້າຜູ້ມີອຳນາດທັງປວງອົງນັ້ນ, ຜູ້ໃຫ້ກຳລັງ
ແກ່ແຂນຂອງພວກເຮົາ ຈົນວ່າພວກເຮົາມີອຳນາດເກີນກວ່າ
ທ່ານ, ດ້ວຍສັດທາຂອງພວກເຮົາ, ດ້ວຍສາດສະໜາຂອງພວກ
ເຮົາ, ແລະ ດ້ວຍ ພິທີການແຫ່ງການນະມັດສະການຂອງພວກ
ເຮົາ, ແລະ ດ້ວຍສາດສະໜາຈັກຂອງພວກເຮົາ, ແລະ ດ້ວຍ
ຄວາມຊ່ວຍເຫລືອອັນສັກສິດທີ່ພວກເຮົາໄດ້ເປັນໜີ້ເມຍຂອງ
ພວກເຮົາ ແລະ ລູກຂອງພວກເຮົາ, ດ້ວຍ ເສລີພາບ ຊຶ່ງຜູກມັດ
ພວກເຮົາໄວ້ກັບແຜ່ນດິນຂອງພວກເຮົາ ແລະ ປະເທດຊາດ
ຂອງພວກເຮົາ; ແທ້ຈິງແລ້ວ, ແລະ ດ້ວຍການຮັກສາພຣະຄຳ
ອັນສັກສິດຂອງພຣະເຈົ້າ, ຊຶ່ງພວກເຮົາໄດ້ເປັນໜີ້ຢູ່ສຳລັບ
ຄວາມຜາສຸກຂອງພວກເຮົານີ້; ແລະ ທຸກສິ່ງທຸກຢ່າງເປັນທີ່ຮັກ
ຫອມທີ່ສຸດຂອງພວກເຮົາ—

Alma 44

And it came to pass that they did stop and withdrew a pace from them. And Moroni said unto Zerahemnah: Behold, Zerahemnah, that we do not desire to be men of blood. Ye know that ye are in our hands, yet we do not desire to slay you.

Behold, we have not come out to battle against you that we might shed your blood for power; neither do we desire to bring any one to the yoke of bondage. But this is the very cause for which ye have come against us; yea, and ye are angry with us because of our religion.

But now, ye behold that the Lord is with us; and ye behold that he has delivered you into our hands. And now I would that ye should understand that this is done unto us because of our religion and our faith in Christ. And now ye see that ye cannot destroy this our faith.

Now ye see that this is the true faith of God; yea, ye see that God will support, and keep, and preserve us, so long as we are faithful unto him, and unto our faith, and our religion; and never will the Lord suffer that we shall be destroyed except we should fall into transgression and deny our faith.

And now, Zerahemnah, I command you, in the name of that all-powerful God, who has strengthened our arms that we have gained power over you, by our faith, by our religion, and by our rites of worship, and by our church, and by the sacred support which we owe to our wives and our children, by that liberty which binds us to our lands and our country; yea, and also by the maintenance of the sacred word of God, to which we owe all our happiness; and by all that is most dear unto us—

ຜ ແທ້ຈິງແລ້ວ, ນີ້ຍັງບໍ່ໝົດ; ເພື່ອເຫັນແກ່ຊີວິດຂອງທ່ານ, ຂ້າພະເຈົ້າຈຶ່ງບັນຊາທ່ານໃຫ້ມອບອາວຸດແຫ່ງສົງຄາມຂອງທ່ານທັງໝົດໃຫ້ຂ້າພະເຈົ້າເສຍ, ແລ້ວຂ້າພະເຈົ້າຈະບໍ່ພະຍາຍາມເອົາຊີວິດຂອງທ່ານ, ແຕ່ຈະໄວ້ຊີວິດຂອງທ່ານ, ຖ້າຫາກທ່ານຈະໄປຕາມເສັ້ນທາງຂອງທ່ານ ແລະ ບໍ່ກັບມາເຮັດສົງຄາມກັບພວກເຮົາອີກ.

Yea, and this is not all; I command you by all the desires which ye have for life, that ye deliver up your weapons of war unto us, and we will seek not your blood, but we will spare your lives, if ye will go your way and come not again to war against us.

ກ ແລະ ບັດນີ້, ຖ້າທ່ານບໍ່ເຮັດຕາມ, ຈົ່ງເບິ່ງ, ທ່ານຢູ່ໃນກຳມືຂອງພວກເຮົາ, ແລະ ຂ້າພະເຈົ້າຈະສັ່ງໃຫ້ຄົນຂອງຂ້າພະເຈົ້າເຂົ້າໂຈມຕີທ່ານ, ແລະ ເຮັດໃຫ້ຮ່າງກາຍຂອງທ່ານໄດ້ຮັບບາດເຈັບຢ່າງສາຫັດ, ເພື່ອທ່ານຈະໄດ້ໝົດສິ້ນໄປ; ແລະ ເວລານັ້ນພວກເຮົາຈະໄດ້ເຫັນວ່າຜູ້ໃດມີອຳນາດເໜືອກว่าຜູ້ຄົນພວກນີ້; ແທ້ຈິງແລ້ວ, ພວກເຮົາຈະໄດ້ເຫັນວ່າຜູ້ໃດຖືກນຳເອົາໄປສູ່ຄວາມເປັນທາດ.

And now, if ye do not this, behold, ye are in our hands, and I will command my men that they shall fall upon you, and inflict the wounds of death in your bodies, that ye may become extinct; and then we will see who shall have power over this people; yea, we will see who shall be brought into bondage.

ຊ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອເຊຣາເຮັມນາໄດ້ຍິນຂໍ້ຄວາມນີ້ແລ້ວ ລາວໄດ້ອອກມາ ແລະ ໄດ້ມອບຫອກ ແລະ ດາບ, ແລະ ຄັນທະນູໃສ່ມືໂມໂຣໄນ, ແລະ ເວົ້າກັບເພີ່ນວ່າ: ຈົ່ງເບິ່ງ, ນີ້ຄືອາວຸດແຫ່ງສົງຄາມຂອງພວກເຮົາ, ແລະ ພວກເຮົາຈະມອບມັນໃຫ້ແກ່ທ່ານ, ແຕ່ວ່າພວກເຮົາຈະບໍ່ຍອມຕົວເຮັດ ຄຳສາບານຕໍ່ທ່ານ, ເພາະພວກເຮົາຮູ້ຈັກວ່າພວກເຮົາ ແລະ ລູກຫລານຂອງພວກເຮົາຈະລ່ວງລະເມີດມັນ; ແຕ່ຈົ່ງຮັບເອົາອາວຸດແຫ່ງສົງຄາມຂອງພວກເຮົາໄວ້ສາ, ແລະ ປ່ອຍໃຫ້ພວກເຮົາເຂົ້າໄປໃນຖິ່ນແຫ້ງແລ້ງກັນດານເສຍ; ຖ້າບໍ່ດັ່ງນັ້ນ ພວກເຮົາຈະຮັກສາອາວຸດຂອງພວກເຮົາໄວ້, ເຖິງແມ່ນວ່າພວກເຮົາຈະຕາຍ ຫລື ຊະນະກໍຕາມ.

And now it came to pass that when Zerahemnah had heard these sayings he came forth and delivered up his sword and his cimeter, and his bow into the hands of Moroni, and said unto him: Behold, here are our weapons of war; we will deliver them up unto you, but we will not suffer ourselves to take an oath unto you, which we know that we shall break, and also our children; but take our weapons of war, and suffer that we may depart into the wilderness; otherwise we will retain our swords, and we will perish or conquer.

ຍ ຈົ່ງເບິ່ງ, ພວກເຮົາບໍ່ໄດ້ຢູ່ໃນສັດທາອັນດຽວກັນກັບທ່ານ; ພວກເຮົາບໍ່ເຊື່ອວ່າພຣະເຈົ້າໄດ້ສົ່ງພວກເຮົາໃຫ້ມາຢູ່ໃນກຳມືຂອງທ່ານ; ແຕ່ພວກເຮົາເຊື່ອວ່າມັນເປັນຍ້ອນເລ່ຫລ່ຽມຂອງທ່ານທີ່ໄດ້ປົກປ້ອງຕົວເອງໃຫ້ພົ້ນຈາກດາບຂອງພວກເຮົາ. ຈົ່ງເບິ່ງ, ມັນເປັນຍ້ອນ ແຜ່ນປົກເອິກ ແລະ ໂລ່ທີ່ປົກປ້ອງທ່ານໄວ້.

Behold, we are not of your faith; we do not believe that it is God that has delivered us into your hands; but we believe that it is your cunning that has preserved you from our swords. Behold, it is your breastplates and your shields that have preserved you.

ຍສ ແລະ ບັດນີ້ເວລາເຊຣາເຮັມນາໄດ້ເວົ້າຈົບແລ້ວ, ໂມໂຣໄນກໍສົ່ງດາບ ແລະ ອາວຸດແຫ່ງສົງຄາມຄືນໃຫ້ເຊຣາເຮັມນາ, ຊຶ່ງລາວໄດ້ຮັບເອົາຄືນ, ກ່າວວ່າ: ຈົ່ງເບິ່ງ ພວກເຮົາຈະຢຸດການຕໍ່ສູ້.

And now when Zerahemnah had made an end of speaking these words, Moroni returned the sword and the weapons of war, which he had received, unto Zerahemnah, saying: Behold, we will end the conflict.

ຍເອ ບັດນີ້ຂ້າພະເຈົ້າຈະເອົາຄວາມເວົ້າທີ່ເວົ້າໄປແລ້ວຄືນບໍ່ໄດ້, ສະນັ້ນ ຕາບໃດທີ່ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່, ທ່ານຈະອອກໄປບໍ່ໄດ້ ເວັ້ນເສຍແຕ່ທ່ານຈະອອກໄປພ້ອມກັບຄຳສາບານວ່າທ່ານຈະບໍ່ກັບມາກໍ່ສົງຄາມກັບພວກເຮົາອີກ. ບັດນີ້ທ່ານຢູ່ໃນກຳມືຂອງພວກເຮົາແລ້ວ ແລະ ພວກເຮົາຈະເຮັດໃຫ້ເລືອດຂອງທ່ານຕົກລົງສູ່ພື້ນດິນເວລາໃດກໍໄດ້, ບໍ່ດັ່ງນັ້ນທ່ານຈົ່ງຍອມຮັບເອົາເງື່ອນໄຂຊຶ່ງຂ້າພະເຈົ້າໄດ້ສະເໜີມານັ້ນ.

Now I cannot recall the words which I have spoken, therefore as the Lord liveth, ye shall not depart except ye depart with an oath that ye will not return again against us to war. Now as ye are in our hands we will spill your blood upon the ground, or ye shall submit to the conditions which I have proposed.

໑໒ ແລະ ບັດນີ້ເມື່ອໂມໂຣໄນກ່າວຂໍ້ຄວາມນີ້ແລ້ວ, ເຊຣາເຮັມນາກໍ
ຈັບເອົາດາບຂອງລາວໄວ້, ຍ້ອນຄວາມຄຽດແຄ້ນໃຫ້ໂມໂຣໄນ
ຫລາຍ, ແລະ ລາວໄດ້ແລ່ນມາໃສ່ເພື່ອຈະໄດ້ຂ້າໂມໂຣໄນ; ແຕ່
ເວລາລາວກຳລັງຍົກດາບຂຶ້ນນັ້ນ, ຈົ່ງເບິ່ງ, ທະຫານຜູ້ໜຶ່ງຂອງ
ໂມໂຣໄນໄດ້ຟັນມັນຈົນຕົກລົງຢູ່ພື້ນດິນ ແລະ ມັນຫັກຢູ່ໃກ້
ດ້າມ; ແລະ ລາວໄດ້ຟັນເຊຣາເຮັມນາອີກ ຄືລາວໄດ້ຕັດໜັງຫົວ
ຂອງລາວ ແລະ ມັນໄດ້ຕົກລົງຢູ່ພື້ນດິນ. ແລະ ເຊຣາເຮັມນາຈຶ່ງ
ຖອຍໜີໄປຕໍ່ໜ້າພວກເຂົາເຂົ້າໄປຢູ່ໃນທ່າມກາງກອງທະຫານ
ຂອງຕົນ.

And now when Moroni had said these words, Zerahemnah retained his sword, and he was angry with Moroni, and he rushed forward that he might slay Moroni; but as he raised his sword, behold, one of Moroni's soldiers smote it even to the earth, and it broke by the hilt; and he also smote Zerahemnah that he took off his scalp and it fell to the earth. And Zerahemnah withdrew from before them into the midst of his soldiers.

໑໓ ແລະ ເຫດການໄດ້ບັງເກີດຂຶ້ນຄື ທະຫານຜູ້ທີ່ຢືນຢູ່ຂ້າງ, ຊຶ່ງ
ເປັນຜູ້ຕັດໜັງຫົວຂອງເຊຣາເຮັມນາອອກ, ໄດ້ຈັບເອົາໜັງຫົວ
ຂຶ້ນຈາກພື້ນດິນໂດຍຈັບເສັ້ນຜົມ, ແລະ ສຽບມັນໄວ້ທີ່ປາຍດາບ
ແລະ ເດ່ມັນອອກໄປຫາພວກເລມັນ, ແລະ ຮ້ອງໃສ່ພວກເຂົາ
ດ້ວຍສຽງອັນດັງວ່າ:

And it came to pass that the soldier who stood by, who smote off the scalp of Zerahemnah, took up the scalp from off the ground by the hair, and laid it upon the point of his sword, and stretched it forth unto them, saying unto them with a loud voice:

໑໔ ໜັງຫົວຂອງຫົວໜ້າຂອງພວກທ່ານຕົກລົງພື້ນດິນແບບ
ໃດ, ພວກທ່ານກໍຈະລົ້ມລົງກັບພື້ນດິນແບບນັ້ນ, ເວັ້ນເສຍແຕ່
ພວກທ່ານຈະມອບອາວຸດແຫ່ງສົງຄາມຂອງພວກທ່ານໃຫ້
ພວກເຮົາເສຍກ່ອນ ແລ້ວອອກໄປພ້ອມດ້ວຍພັນທະສັນຍາ
ແຫ່ງສັນຕິພາບ.

Even as this scalp has fallen to the earth, which is the scalp of your chief, so shall ye fall to the earth except ye will deliver up your weapons of war and depart with a covenant of peace.

໑໕ ບັດນີ້ເມື່ອຊາວເລມັນໄດ້ຍິນຂໍ້ຄວາມນີ້ແລ້ວ ແລະ ໄດ້ເຫັນ
ໜັງຫົວຢູ່ປາຍດາບ, ພວກເຂົາຫລາຍຄົນເກີດມີຄວາມຢ້ານກົວ
ຂຶ້ນ; ແລະ ພວກເຂົາໄດ້ອອກມາ ແລະ ໂຍນອາວຸດແຫ່ງສົງຄາມ
ໄວ້ທີ່ຕີນຂອງໂມໂຣໄນ, ແລະ ເຂົ້າມາເຮັດ ພັນທະສັນຍາແຫ່ງ
ສັນຕິພາບ. ແລະ ຫລາຍຕໍ່ຫລາຍຄົນໄດ້ເຂົ້າມາເຮັດພັນທະ
ສັນຍາ ແລະ ໄດ້ໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ.

Now there were many, when they heard these words and saw the scalp which was upon the sword, that were struck with fear; and many came forth and threw down their weapons of war at the feet of Moroni, and entered into a covenant of peace. And as many as entered into a covenant they suffered to depart into the wilderness.

໑໖ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເຊຣາເຮັມນາກໍມີຄວາມຄຽດ
ແຄ້ນຂຶ້ນຫລາຍກວ່າເກົ່າ, ແລະ ລາວໄດ້ຍຸຍົງໃຫ້ພວກທະຫານ
ສ່ວນທີ່ເຫລືອຢູ່ຂອງລາວໃຫ້ມີຄວາມຄຽດແຄ້ນເພື່ອພວກເຂົາ
ຈະໄດ້ຕໍ່ສູ້ຢ່າງຮຸນແຮງກັບຊາວນີໄຟອີກ.

Now it came to pass that Zerahemnah was exceedingly wroth, and he did stir up the remainder of his soldiers to anger, to contend more powerfully against the Nephites.

໑໗ ແລະ ບັດນີ້ໂມໂຣໄນມີຄວາມຄຽດແຄ້ນຫລາຍຂຶ້ນຍ້ອນຄວາມ
ດື້ດ້ານຂອງຊາວເລມັນ; ສະນັ້ນເພິ່ນຈຶ່ງໄດ້ສັ່ງໃຫ້ກອງທັບຂອງ
ເພິ່ນເຂົ້າໂຈມຕີ ແລະ ຂ້າພວກເຂົາເຫລົ່ານັ້ນຖິ້ມ. ແລະ
ເຫດການໄດ້ບັງເກີດຂຶ້ນຄື ທະຫານຂອງໂມໂຣໄນໄດ້ເລີ່ມຂ້າ
ພວກເຂົາ; ແທ້ຈິງແລ້ວ, ຊາວເລມັນກໍໄດ້ຕໍ່ສູ້ດ້ວຍດາບຢ່າງສຸດ
ກຳລັງຂອງຕົນ.

And now Moroni was angry, because of the stubbornness of the Lamanites; therefore he commanded his people that they should fall upon them and slay them. And it came to pass that they began to slay them; yea, and the Lamanites did contend with their swords and their might.

໑໘ ແຕ່ຈົ່ງເບິ່ງ, ເນື້ອໜັງຂອງພວກເຂົາເປືອຍເປົ່າ ແລະ ຫົວກໍ
ບໍ່ມີສິ່ງປົກບັງ ຈຶ່ງໄດ້ເປີດປ່ອງໃຫ້ດາບອັນແຫລມຄົມຂອງຊາວ
ນີໄຟ; ແທ້ຈິງແລ້ວ, ຈົ່ງເບິ່ງ ພວກເຂົາຖືກແທງ ແລະ ຖືກຟັນ,
ແລະ ໄດ້ລົ້ມຕາຍຢ່າງວ່ອງໄວດ້ວຍດາບຂອງຊາວນີໄຟ ແລະ
ພວກເຂົາເລີ່ມຖືກກວາດລົງດັ່ງທີ່ທະຫານຂອງໂມໂຣໄນ
ທຳນາຍໄວ້.

But behold, their naked skins and their bare heads were exposed to the sharp swords of the Nephites; yea, behold they were pierced and smitten, yea, and did fall exceedingly fast before the swords of the Nephites; and they began to be swept down, even as the soldier of Moroni had prophesied.

๑๗ ບັດນີ້ເມື່ອເຊຣາເຮັມນາເຫັນວ່າພວກຕົນເກືອບຈະຖືກຂ້າ ຕາຍໝົດແລ້ວ, ຈຶ່ງໄດ້ຮ້ອງອອກມາຢ່າງສຸດກຳລັງຕໍ່ໂມໂຣໄນ, ສັນຍາວ່າລາວ ແລະ ຜູ້ຄົນຂອງລາວຈະເຮັດພັນທະສັນຍາ, ຖ້າ ຫາກທາງຝ່າຍນີໄຟຈະໄວ້ຊີວິດຊາວເລມັນຜູ້ທີ່ຍັງເຫລືອຢູ່, ວ່າ ພວກເຂົາຈະບໍ່ມາກໍ່ສົງຄາມກັບຊາວນີໄຟ ອີກ.

๘๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນໄດ້ສັ່ງໃຫ້ການຂ້າ ຟັນຢຸດລົງ. ແລະ ເພີ່ນໄດ້ຮັບເອົາອາວຸດແຫ່ງສົງຄາມຈາກຊາວ ເລມັນ; ແລະ ຫລັງຈາກພວກເຂົາເຂົ້າມາເຮັດ ພັນທະສັນຍາ ແຫ່ງສັນຕິພາບກັບເພີ່ນແລ້ວ ພວກເຂົາຈຶ່ງໄດ້ຮັບອະນຸຍາດໃຫ້ ໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ.

๘๑ ບັດນີ້ພວກເຮົາບໍ່ໄດ້ນັບຈຳນວນຄົນທີ່ຕາຍໄປ ຍ້ອນວ່າຄວາມ ຫລວງຫລາຍຂອງມັນ; ແທ້ຈິງແລ້ວ, ຈຳນວນຄົນຕາຍນັ້ນມີ ຫລາຍທີ່ສຸດ, ທັງຊາວນີໄຟ ແລະ ຊາວເລມັນ.

๘๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວນີໄຟໄດ້ໂຍນຄົນຕາຍ ລົງໄປໃນນ້ຳຊີໂດນ, ແລະ ມັນໄດ້ໄຫລໄປ ແລະ ຖືກຝັງຢູ່ໃນ ຄວາມເລິກຂອງທະເລ.

๘๓ ແລະ ກອງທັບຂອງຊາວນີໄຟ ຫລື ຂອງໂມໂຣໄນ, ໄດ້ກັບຄືນ ໄປຫາເຮືອນຊານຂອງພວກເຂົາ ແລະ ແຜ່ນດິນຂອງພວກເຂົາ.

๘๔ ແລະ ປີທີສິບແປດແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ ຄົນຂອງນີໄຟໄດ້ສິ້ນສຸດລົງດັ່ງນີ້. ແລະ ບັນທຶກຂອງແອວມາຊຶ່ງ ມີຂຽນໄວ້ໃນແຜ່ນຈາລຶກຂອງນີໄຟກໍໄດ້ຈົບລົງດັ່ງນີ້.

Now Zerahemnah, when he saw that they were all about to be destroyed, cried mightily unto Moroni, promising that he would covenant and also his people with them, if they would spare the remainder of their lives, that they never would come to war again against them.

And it came to pass that Moroni caused that the work of death should cease again among the people. And he took the weapons of war from the Lamanites; and after they had entered into a covenant with him of peace they were suffered to depart into the wilderness.

Now the number of their dead was not numbered because of the greatness of the number; yea, the number of their dead was exceedingly great, both on the Nephites and on the Lamanites.

And it came to pass that they did cast their dead into the waters of Sidon, and they have gone forth and are buried in the depths of the sea.

And the armies of the Nephites, or of Moroni, returned and came to their houses and their lands.

And thus ended the eighteenth year of the reign of the judges over the people of Nephi. And thus ended the record of Alma, which was written upon the plates of Nephi.

ເລື່ອງລາວຂອງຜູ້ຄົນຂອງນີໄຟ, ແລະ ລາຍລະອຽດຂອງ ສົງຄາມ ແລະ ການແຕກແຍກກັນຂອງພວກເຂົາ, ໃນວັນເວລາ ຂອງຮີລາມັນ, ອີງຕາມບັນທຶກຂອງຮີລາມັນ, ຊຶ່ງເພິ່ນໄດ້ເຮັດໄວ້ ໃນວັນເວລາຂອງເພິ່ນ.

The account of the people of Nephi, and their wars and dissensions, in the days of Helaman, according to the record of Helaman, which he kept in his days.

ແອວມາ ๔๕

Alma 45

ນ ແລະ ຄ້າຍໃດທີ່ມີກຳລັງບໍ່ພຽງພໍ ເພີ່ນກໍໄດ້ວາງຈຳນວນ ທະຫານໄວ້ຢ່າງຫລວງຫລາຍ; ແລະ ເພີ່ນໄດ້ເສີມກຳລັງ ແລະ ໄດ້ເຮັດໃຫ້ແຜ່ນດິນຊຶ່ງຊາວນີໄຟເປັນເຈົ້າຂອງເຂັ້ມແຂງຂຶ້ນ ເລື້ອຍໆ.

And in their weakest fortifications he did place the greater number of men; and thus he did fortify and strengthen the land which was possessed by the Nephites.

ຊ ແລະ ເພີ່ນໄດ້ຕຽມພ້ອມຢູ່ສະເໝີເພື່ອວ່າຈະໄດ້ ສະໜັບສະໜູນເສລີພາບຂອງພວກເຂົາ, ແຜ່ນດິນຂອງພວກ ເຂົາ, ເມຍຂອງພວກເຂົາ, ແລະ ລູກຂອງພວກເຂົາ, ແລະ ສັນຕິສຸກຂອງພວກເຂົາ, ແລະ ເພື່ອວ່າພວກເຂົາຈະໄດ້ມີຊີວິດຢູ່ ກັບພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ແລະ ເພື່ອ ພວກເຂົາຈະໄດ້ຮັກສາສິ່ງທີ່ສັດຕູຂອງພວກເຂົາເອີ້ນว่า ອຸດົມການແຫ່ງຄຣິດສະຕຽນ.

And thus he was preparing to support their liberty, their lands, their wives, and their children, and their peace, and that they might live unto the Lord their God, and that they might maintain that which was called by their enemies the cause of Christians.

ຊ.ນ ແລະ ໂມໂຣໄນເປັນຄົນແຂງແຮງ ແລະ ມີກຳລັງຫລາຍ; ແລະ ເພີ່ນເປັນຄົນ ສະຫລຽວສະຫລາດ; ແທ້ຈິງແລ້ວ, ເພີ່ນເປັນຄົນ ທີ່ບໍ່ປີຕິຍິນດີໃນການນອງເລືອດ; ແຕ່ເປັນຄົນທີ່ປີຕິຍິນດີໃນ ເສລີພາບ ແລະ ອິດສະລະພາບຂອງປະເທດຊາດຂອງຕົນ, ແລະ ເພື່ອວ່າພີ່ນ້ອງຂອງເພີ່ນຈະໄດ້ຫລີກເວັ້ນຈາກຄວາມເປັນ ທາດ ແລະ ຂ້ອຍຂ້າ;

And Moroni was a strong and a mighty man; he was a man of a perfect understanding; yea, a man that did not delight in bloodshed; a man whose soul did joy in the liberty and the freedom of his country, and his brethren from bondage and slavery;

ຊ.ສ ແທ້ຈິງແລ້ວ, ເພີ່ນເປັນຄົນທີ່ມີໃຈຊຶ່ງເຕັມໄປດ້ວຍຄວາມ ຂອບພຣະໄທພຣະເຈົ້າຂອງເພີ່ນ, ສຳລັບສິດທິພິເສດ ແລະ ພອນຕ່າງໆທີ່ພຣະອົງໄດ້ປະທານໃຫ້ແກ່ຜູ້ຄົນຂອງເພີ່ນ; ແລະ ເພີ່ນເປັນຄົນທີ່ອອກແຮງງານຢ່າງຂະຫຍັນຂັນແຂງ ເພື່ອ ຄວາມຜາສຸກ ແລະ ເພື່ອຄວາມປອດໄພຂອງຜູ້ຄົນຂອງເພີ່ນ.

Yea, a man whose heart did swell with thanksgiving to his God, for the many privileges and blessings which he bestowed upon his people; a man who did labor exceedingly for the welfare and safety of his people.

ຊ.ມ ແທ້ຈິງແລ້ວ, ແລະ ເພີ່ນເປັນຄົນທີ່ໝັ້ນຄົງຢູ່ນຳສັດທາໃນ ພຣະຄຣິດ, ແລະ ເພີ່ນໄດ້ກ່າວ ຄຳສາບານໄວ້ວ່າ ເພີ່ນຈະ ປ້ອງກັນຜູ້ຄົນຂອງເພີ່ນ, ສິດຂອງເພີ່ນ, ແລະ ປະເທດຊາດ ຂອງເພີ່ນ, ແລະ ສາດສະໜາຂອງເພີ່ນ, ເຖິງແມ່ນว่าເພີ່ນຈະ ສູນເສຍເລືອດເນື້ອຂອງເພີ່ນກໍຕາມ.

Yea, and he was a man who was firm in the faith of Christ, and he had sworn with an oath to defend his people, his rights, and his country, and his religion, even to the loss of his blood.

ຊ.ສ ບັດນີ້ຊາວນີໄຟໄດ້ຮັບການສິດສອນໃຫ້ປ້ອງກັນຕົວເອງຈາກ ສັດຕູ, ຈົນເຖິງການນອງເລືອດຖ້າຫາກຈຳເປັນ; ແທ້ຈິງແລ້ວ, ແລະ ພວກເຂົາໄດ້ຮັບການສິດສອນว่า ບໍ່ໃຫ້ຮຸກຮານຜູ້ໃດ, ແທ້ ຈິງແລ້ວ, ບໍ່ໃຫ້ຍົກດາບຂຶ້ນເລີຍເວັ້ນເສຍແຕ່ຈະເປັນການຕໍ່ສູ້ ສັດຕູ, ຍົກເວັ້ນແຕ່ຈະເປັນໄປເພື່ອປົກປ້ອງຊີວິດຂອງຕົນເອງ ເທົ່ານັ້ນ.

Now the Nephites were taught to defend themselves against their enemies, even to the shedding of blood if it were necessary; yea, and they were also taught never to give an offense, yea, and never to raise the sword except it were against an enemy, except it were to preserve their lives.

ຊ.ຫ ແລະ ນີ້ຄືສັດທາຂອງພວກເຂົາ, ໂດຍການປະຕິບັດແບບນີ້ ພຣະເຈົ້າຈະເຮັດໃຫ້ພວກເຂົາຈະເລີນຮຸ່ງເຮືອງຢູ່ໃນແຜ່ນດິນ, ຫລື ອີກຄຳໜຶ່ງ, ຖ້າພວກເຂົາຊື່ສັດໃນການຮັກສາພຣະບັນຍັດ ຂອງພຣະເຈົ້າແລ້ວ ພຣະອົງຈະເຮັດໃຫ້ພວກເຂົາຈະເລີນຮຸ່ງ ເຮືອງຢູ່ໃນແຜ່ນດິນ; ແທ້ຈິງແລ້ວ, ຈະເຕືອນພວກເຂົາໃຫ້ອອກ ໜີໄປ, ຫລື ວ່າໃຫ້ຕຽມເພື່ອສົງຄາມ, ອີງຕາມຄວາມ ອັນຕະລາຍຂອງພວກເຂົາ;

And this was their faith, that by so doing God would prosper them in the land, or in other words, if they were faithful in keeping the commandments of God that he would prosper them in the land; yea, warn them to flee, or to prepare for war, according to their danger;

ແລະ ພຣະເຈົ້າຈະເຮັດໃຫ້ເປັນທີ່ຮູ້ຈັກແກ່ພວກເຂົາອີກວ່າ ພວກເຂົາຄວນຈະໄປທາງໃດເພື່ອຕໍ່ສູ້ກັບສັດຕູຂອງພວກເຂົາ, ແລະ ໂດຍການກະທຳດັ່ງນີ້, ພຣະຜູ້ເປັນເຈົ້າຈະໄດ້ປົດປ່ອຍ ພວກເຂົາ; ແລະ ນີ້ຄືສັດທາຂອງໂມໂຣໄນ ແລະ ໃຈຂອງເພິ່ນ ປາບປື້ມໃນສິ່ງເຫລົ່ານັ້ນ; ບໍ່ແມ່ນໃນການນອງເລືອດ, ແຕ່ໃນ ການເຮັດຄວາມດີ, ໃນການປ້ອງກັນຜູ້ຄົນຂອງເພິ່ນ, ແທ້ຈິງ ແລ້ວ, ໃນການຮັກສາພຣະບັນຍັດຂອງພຣະເຈົ້າ, ແທ້ຈິງແລ້ວ, ແລະ ໃນການຕ້ານທານກັບຄວາມຊົ່ວຮ້າຍ.

And also, that God would make it known unto them whither they should go to defend themselves against their enemies, and by so doing, the Lord would deliver them; and this was the faith of Moroni, and his heart did glory in it; not in the shedding of blood but in doing good, in preserving his people, yea, in keeping the commandments of God, yea, and resisting iniquity.

ແທ້ຈິງແລ້ວ, ຂ້າພະເຈົ້າກ່າວຕາມຄວາມຈິງກັບພວກທ່ານ ວ່າ, ຖ້າຫາກຄົນທັງປວງໄດ້ເປັນມາແລ້ວ ແລະ ເປັນຢູ່, ແລະ ຈະ ເປັນຢູ່, ຄືກັນກັບໂມໂຣໄນ, ຈົ່ງເບິ່ງ, ອຳນາດຂອງນະລົກນັ້ນຈະ ສັ່ນສະເທືອນຕະຫລອດການ; ແທ້ຈິງແລ້ວ, ມານຈະບໍ່ມີ ອຳນາດເໜືອໃຈຂອງລູກຫລານມະນຸດເລີຍ.

Yea, verily, verily I say unto you, if all men had been, and were, and ever would be, like unto Moroni, behold, the very powers of hell would have been shaken forever; yea, the devil would never have power over the hearts of the children of men.

ຈົ່ງເບິ່ງ, ເພິ່ນເປັນຄົນຄືກັນກັບອຳໂມນ, ລູກຊາຍຂອງໂມໄຊ ຢາ, ແທ້ຈິງແລ້ວ, ຄືກັນກັບລູກຊາຍຜູ້ອື່ນໆຂອງໂມໄຊຢາ, ແທ້ ຈິງແລ້ວ, ແລະ ຄືກັນກັບແອວມາ ແລະ ພວກລູກຊາຍຂອງເພິ່ນ ນຳອີກ, ເພາະວ່າເຂົາເຈົ້າເຫລົ່ານັ້ນລ້ວນແລ້ວແຕ່ເປັນຄົນຂອງ ພຣະເຈົ້າທັງນັ້ນ.

Behold, he was a man like unto Ammon, the son of Mosiah, yea, and even the other sons of Mosiah, yea, and also Alma and his sons, for they were all men of God.

ບັດນີ້ຈົ່ງເບິ່ງ, ຮີລາມັນ ແລະ ພີ່ນ້ອງຂອງເພິ່ນກໍບໍ່ໄດ້ຮັບໃຊ້ ຜູ້ຄົນໜ້ອຍໄປກວ່າໂມໂຣໄນເລີຍ; ເພາະເຂົາເຈົ້າໄດ້ສັ່ງສອນ ພຣະຄຳຂອງພຣະເຈົ້າ, ແລະ ເຂົາເຈົ້າໄດ້ໃຫ້ບັບຕິສະມາໄວ້ກັບ ການກັບໃຈ ແກ່ຄົນທັງປວງທີ່ຍອມເຊື່ອຟັງຄຳເວົ້າຂອງ ເຂົາເຈົ້າ.

Now behold, Helaman and his brethren were no less serviceable unto the people than was Moroni; for they did preach the word of God, and they did baptize unto repentance all men whosoever would hearken unto their words.

ແລະ ເຂົາເຈົ້າໄດ້ອອກໄປດັ່ງນີ້, ແລະ ຜູ້ຄົນໄດ້ ຖ່ອມຕົວຍ້ອນ ຄຳເວົ້າຂອງເຂົາເຈົ້າ, ເຖິງຂະໜາດທີ່ເຂົາເຈົ້າໄດ້ເປັນທີ່ຊົງ ໂປດ ປານຂອງພຣະຜູ້ເປັນເຈົ້າ, ແລະ ດັ່ງນັ້ນພວກເຂົາຈຶ່ງໄດ້ເປັນ ອິດສະລະຈາກສົງຄາມ ແລະ ຈາກການຂັດແຍ້ງໃນບັນດາພວກ ເຂົາເອງ, ແທ້ຈິງແລ້ວ, ເປັນເວລາເຖິງສີ່ປີ.

And thus they went forth, and the people did humble themselves because of their words, insomuch that they were highly favored of the Lord, and thus they were free from wars and contentions among themselves, yea, even for the space of four years.

ແຕ່ວ່າຄືກັນກັບທີ່ຂ້າພະເຈົ້າໄດ້ເວົ້າໃນຕອນທ້າຍປີທີສິບເກົ້າ ນັ້ນ, ແທ້ຈິງແລ້ວ, ມັນມີສັນຕິສຸກໃນບັນດາພວກເຂົາເອງ, ພວກເຂົາໄດ້ຖືກບັງຄັບຢ່າງບໍ່ເຕັມໃຈໃຫ້ໄປຕໍ່ສູ້ກັບຊາວເລມັນ ພີ່ນ້ອງຂອງພວກເຂົາ.

But, as I have said, in the latter end of the nineteenth year, yea, notwithstanding their peace amongst themselves, they were compelled reluctantly to contend with their brethren, the Lamanites.

ແທ້ຈິງແລ້ວ, ແລະ ໂດຍສະຫລຸບ, ສົງຄາມຂອງພວກເຂົາທີ່ ເຮັດກັບຊາວເລມັນບໍ່ເຄີຍຢຸດລົງເລີຍເປັນເວລາຫລາຍປີ, ທັງທີ່ ພວກເຂົາບໍ່ເຕັມໃຈຢາກເຮັດ.

Yea, and in fine, their wars never did cease for the space of many years with the Lamanites, notwithstanding their much reluctance.

ບັດນີ້, ພວກເຂົາ ເສຍໃຈທີ່ຕ້ອງຈັບອາວຸດຂຶ້ນຕໍ່ສູ້ກັບຊາວເລ ມັນອີກ, ເພາະວ່າພວກເຂົາບໍ່ພໍໃຈກັບການນອງເລືອດເລີຍ; ແທ້ຈິງແລ້ວ, ແລະ ນີ້ຍັງບໍ່ໝົດ—ພວກເຂົາເສຍໃຈທີ່ໄດ້ເປັນ ທາງສົ່ງພີ່ນ້ອງຂອງພວກເຂົາຢ່າງຫລວງຫລາຍອອກຈາກ ໂລກນີ້ໄປສູ່ໂລກນິລັນດອນ, ໂດຍບໍ່ໄດ້ຕຽມພ້ອມທີ່ຈະພົບກັບ ພຣະເຈົ້າຂອງພວກເຂົາເລີຍ.

Now, they were sorry to take up arms against the Lamanites, because they did not delight in the shedding of blood; yea, and this was not all—they were sorry to be the means of sending so many of their brethren out of this world into an eternal world, unprepared to meet their God.

ຄ.ສ ເຖິງຢ່າງໃດກໍຕາມ, ພວກເຂົາຈະບໍ່ຍອມເດັດຂາດທີ່ຈະ ສະລະຊີວິດຂອງຕົນໄປລ້ຳໆ, ແລະ ປ່ອຍໃຫ້ ເມຍຂອງພວກເຂົາ ແລະ ລູກຂອງພວກເຂົາຖືກຂ້າດ້ວຍຄວາມຮ້າຍກາດ ແລະ ຄວາມປ່າເຖື່ອນຂອງຄົນ ຊຶ່ງເຄີຍເປັນພີ່ນ້ອງກັນມາກ່ອນ, ແທ້ຈິງແລ້ວ, ຊຶ່ງເປັນຜູ້ທີ່ໄດ້ ແຍກອອກໄປຈາກສາດສະໜາຈັກ, ແລະ ໜີຈາກພວກເຂົາໄປເພື່ອຈະໄດ້ກັບມາທຳລາຍພີ່ນ້ອງ ຂອງຕົນ ໂດຍການເຂົ້າຮ່ວມກັບຊາວເລມັນ.

ຄ.ສ ແທ້ຈິງແລ້ວ, ພວກເຂົາທົນບໍ່ໄດ້ທີ່ພີ່ນ້ອງຂອງພວກເຂົາຈະ ປິຕິຍິນດີຢູ່ກັບເລືອດຂອງຊາວນີໄຟ ເພາະຄຳສັນຍາຂອງ ພຣະເຈົ້າທີ່ມີຢູ່ວ່າ ຕາບໃດທີ່ຍັງມີຄົນຮັກສາພຣະບັນຍັດຂອງ ພຣະເຈົ້າຢູ່ ເພາະຄຳສັນຍາຂອງພຣະຜູ້ເປັນເຈົ້າມີຢູ່ວ່າ ຖ້າຫາກ ພວກເຂົາຈະຮັກສາພຣະບັນຍັດຂອງພຣະອົງ ພວກເຂົາຈະຮຸ່ງ ເຮືອງຢູ່ໃນແຜ່ນດິນ.

Nevertheless, they could not suffer to lay down their lives, that their wives and their children should be massacred by the barbarous cruelty of those who were once their brethren, yea, and had dissented from their church, and had left them and had gone to destroy them by joining the Lamanites.

Yea, they could not bear that their brethren should rejoice over the blood of the Nephites, so long as there were any who should keep the commandments of God, for the promise of the Lord was, if they should keep his commandments they should prosper in the land.

ແອວມາ ๔๙

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນເດືອນທີສິບເອັດຂອງປີ ທີສິບເກົ້າ, ໃນວັນທີສິບຂອງເດືອນນີ້ ມີຄົນເຫັນກອງທັບຂອງ ຊາວເລມັນຍົກໄປທາງແຜ່ນດິນອໍາໂມນໄນຮາ.

๒ ແລະ ຈົ່ງເບິ່ງ, ເມືອງນີ້ຖືກສ້າງຂຶ້ນໃໝ່ ແລະ ໂມໂຣໄນໄດ້ຕັ້ງ ກອງທັບໄວ້ໃກ້ຊາຍແດນຂອງເມືອງນີ້, ແລະ ພວກເຂົາໄດ້ຄູນ ດິນຂຶ້ນໂດຍຮອບເພື່ອປ້ອງກັນຕົນເອງຈາກລູກທະນູ ແລະ ກ້ອນຫີນຂອງຊາວເລມັນ; ເພາະຈົ່ງເບິ່ງ, ພວກເຂົາໄດ້ຕໍ່ສູ້ດ້ວຍ ກ້ອນຫີນ ແລະ ດ້ວຍລູກທະນູ.

๓ ຈົ່ງເບິ່ງ, ຂ້າພະເຈົ້າກ່າວວ່າ ເມືອງ ອໍາໂມນໄນຮາໄດ້ຖືກ ສ້າງຂຶ້ນໃໝ່ແລ້ວ. ຂ້າພະເຈົ້າກ່າວກັບພວກທ່ານວ່າ, ແທ້ຈິງ ແລ້ວ, ມັນໄດ້ສ້າງຂຶ້ນໃໝ່ເປັນບາງສ່ວນຍ້ອນວ່າເມືອງນີ້ໄດ້ຖືກ ຊາວເລມັນທໍາລາຍມາເທື່ອໜຶ່ງແລ້ວ ເພາະຄວາມຊົ່ວຮ້າຍຂອງ ຜູ້ຄົນ, ດັ່ງນັ້ນພວກເຂົາຈຶ່ງຄິດວ່າມັນຈະເປັນເຫຍື່ອອັນ ງ່າຍດາຍສໍາລັບພວກເຂົາອີກ.

๔ ແຕ່ຈົ່ງເບິ່ງ, ພວກເຂົາຜິດຫວັງຫລາຍທີ່ສຸດ; ເພາະຈົ່ງເບິ່ງ, ຊາວນີໄຟໄດ້ຂຸດດິນເຮັດເປັນຄັນຄູໄວ້ໂດຍຮອບ, ຊຶ່ງຄັນຄູນັ້ນສູງ ສົມຄວນຈົນວ່າຊາວເລມັນແກວ່ງກ້ອນຫີນ ແລະ ຍິງທະນູຂ້າມ ໄປບໍ່ໄດ້, ທັງຈະເຂົ້າໂຈມຕີກໍບໍ່ໄດ້ ນອກຈາກຈະເຂົ້າໄປທາງປະຕູ ເທົ່ານັ້ນ.

๕ ບັດນີ້ເມື່ອຫົວໜ້າມາຍທະຫານຂອງຊາວເລມັນເຫັນດັ່ງນັ້ນ ກໍແປກໃຈຢ່າງຍິ່ງເພາະປັນຍາຂອງຊາວນີໄຟໃນການຕຽມ ບ່ອນປ້ອງກັນຕົວຂອງພວກເຂົາ.

๖ ບັດນີ້ພວກຜູ້ນໍາຂອງຊາວເລມັນຄິດວ່າ, ຍ້ອນຄວາມ ຫລວງຫລາຍຂອງຜູ້ຄົນຂອງນີໄຟ, ແທ້ຈິງແລ້ວ, ພວກເຂົາຄິດ ວ່າ ພວກເຂົາຈະມີຊ່ອງທາງເພື່ອເຂົ້າໂຈມຕີຊາວນີໄຟຄືກັນກັບ ທີ່ເຄີຍກະທໍາມາແລ້ວ; ແທ້ຈິງແລ້ວ, ພວກເຂົາກໍໄດ້ຕຽມພ້ອມ ຄືກັນ, ພວກເຂົາມີໂລ່ ແລະ ມີແຜ່ນປົກເອິກ; ແລະ ພວກເຂົາກໍ ໄດ້ໃສ່ເຄື່ອງນຸ່ງທີ່ເຮັດດ້ວຍໜັງ, ແທ້ຈິງແລ້ວ, ເປັນເຄື່ອງນຸ່ງທີ່ ໜາເພື່ອປົກປິດຄວາມເປືອຍເປົ່າຂອງພວກເຂົາ.

๗ ແລະ ໂດຍທີ່ຕຽມພ້ອມຮຽບຮ້ອຍດັ່ງນັ້ນ ພວກເຂົາຈຶ່ງຄິດວ່າ ພວກເຂົາຈະເອົາຊະນະ ແລະ ຈະເອົາພີ່ນ້ອງຂອງພວກເຂົາໄປ ຫາແອກແຫ່ງຄວາມເປັນທາດ, ຫລື ຂ້າຖິ້ມໄດ້ຢ່າງງ່າຍດາຍ, ຫລື ຈະທໍາລາຍສັດຕູເສຍໃຫ້ໝົດຕາມຄວາມພໍໃຈຂອງພວກ ເຂົາ.

Alma 49

And now it came to pass in the eleventh month of the nineteenth year, on the tenth day of the month, the armies of the Lamanites were seen approaching towards the land of Ammonihah.

And behold, the city had been rebuilt, and Moroni had stationed an army by the borders of the city, and they had cast up dirt round about to shield them from the arrows and the stones of the Lamanites; for behold, they fought with stones and with arrows.

Behold, I said that the city of Ammonihah had been rebuilt. I say unto you, yea, that it was in part rebuilt; and because the Lamanites had destroyed it once because of the iniquity of the people, they supposed that it would again become an easy prey for them.

But behold, how great was their disappointment; for behold, the Nephites had dug up a ridge of earth round about them, which was so high that the Lamanites could not cast their stones and their arrows at them that they might take effect, neither could they come upon them save it was by their place of entrance.

Now at this time the chief captains of the Lamanites were astonished exceedingly, because of the wisdom of the Nephites in preparing their places of security.

Now the leaders of the Lamanites had supposed, because of the greatness of their numbers, yea, they supposed that they should be privileged to come upon them as they had hitherto done; yea, and they had also prepared themselves with shields, and with breastplates; and they had also prepared themselves with garments of skins, yea, very thick garments to cover their nakedness.

And being thus prepared they supposed that they should easily overpower and subject their brethren to the yoke of bondage, or slay and massacre them according to their pleasure.

ຄ ແຕ່ຈົ່ງເບິ່ງ, ພວກເຂົາເກີດມີຄວາມແປກປະຫລາດໃຈຫລາຍທີ່ສຸດ ເມື່ອພວກເຂົາເຫັນວ່າຊາວນີໄຟໄດ້ ຕຽມຕໍ່ສູ້ກັບພວກເຂົາໃນວິທີທີ່ບໍ່ເຄີຍໄດ້ຮູ້ໄດ້ເຫັນມາກ່ອນໃນບັນດາລູກຫລານຂອງລີໄຮ. ບັດນີ້ພວກເຂົາຕຽມຕໍ່ສູ້ກັບຊາວເລມັນຕາມຄຳແນະນຳຂອງໂມໂຣໄນ.

But behold, to their uttermost astonishment, they were prepared for them, in a manner which never had been known among the children of Lehi. Now they were prepared for the Lamanites, to battle after the manner of the instructions of Moroni.

ງ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນ ຫລື ຊາວອະມາລີໄຄຢາແປກປະຫລາດໃຈຢ່າງຍິ່ງກັບການຕຽມສົງຄາມຂອງພວກເຂົາ.

And it came to pass that the Lamanites, or the Amalickiahites, were exceedingly astonished at their manner of preparation for war.

ຈ ບັດນີ້, ຖ້າຫາກກະສັດອະມາລີໄຄຢາໄດ້ລົງມາຈາກ ແຜ່ນດິນນີໄຟເພື່ອເປັນຜູ້ນຳກອງທັບຂອງລາວ, ລາວອາດຈະໃຫ້ຊາວເລມັນໂຈມຕີຊາວນີໄຟໃນເມືອງອຳໂມນໄນຮາທັນທີ; ເພາະວ່າລາວບໍ່ໄດ້ຄິດເຖິງເລືອດເນື້ອຂອງຜູ້ຄົນຂອງລາວເລີຍ.

Now, if king Amalickiah had come down out of the land of Nephi, at the head of his army, perhaps he would have caused the Lamanites to have attacked the Nephites at the city of Ammonihah; for behold, he did care not for the blood of his people.

ສ ແຕ່ຈົ່ງເບິ່ງ, ອະມາລີໄຄຢາບໍ່ໄດ້ລົງມາສູ້ຮົບ. ແລະ ຈົ່ງເບິ່ງ, ຫົວໜ້ານາຍທະຫານຂອງລາວບໍ່ກ້າເຂົ້າໂຈມຕີຊາວນີໄຟໃນເມືອງອຳໂມນໄນຮາ, ເພາະວ່າໂມໂຣໄນປ່ຽນວິທີດຳເນີນການງານໃນບັນດາຊາວນີໄຟ, ເຖິງຂະໜາດທີ່ຊາວເລມັນຜິດຫວັງໃນສະຖານທີ່ ຊຶ່ງເຮັດໃຫ້ພວກເຂົາໄດ້ຖອຍໜີໄປເພາະພວກເຂົາເຂົ້າໄປໂຈມຕີບໍ່ໄດ້.

But behold, Amalickiah did not come down himself to battle. And behold, his chief captains durst not attack the Nephites at the city of Ammonihah, for Moroni had altered the management of affairs among the Nephites, insomuch that the Lamanites were disappointed in their places of retreat and they could not come upon them.

ສິບ ສະນັ້ນ ພວກເຂົາຈຶ່ງໄດ້ຖອຍໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ, ແລະ ຍົກຍ້າຍຄ້າຍຂອງພວກເຂົາ ແລະ ເດີນທັບໄປທາງແຜ່ນດິນໂນອາ, ໂດຍຄິດວ່າບ່ອນນັ້ນຈະເປັນບ່ອນທີ່ດີທີ່ສຸດສຳລັບພວກເຂົາທີ່ຈະຕໍ່ສູ້ກັບຊາວນີໄຟ.

Therefore they retreated into the wilderness, and took their camp and marched towards the land of Noah, supposing that to be the next best place for them to come against the Nephites.

ສິບເອັດ ເພາະພວກເຂົາບໍ່ຮູ້ຈັກว่าโมโรไนได้เสิมกำลังไว้, ຫລື ສ້າງ ຄ້າຍຍາມໄວ້ທຸກຫົວເມືອງໂດຍຮອບ; ສະນັ້ນ, ພວກເຂົາຈຶ່ງເດີນທັບໄປຫາແຜ່ນດິນໂນອາ ດ້ວຍມີຄວາມຕັ້ງໃຈອັນແນ່ວແນ່; ແທ້ຈິງແລ້ວ, ຫົວໜ້ານາຍທະຫານຂອງພວກເຂົາໄດ້ອອກມາໃຫ້ຄຳສາບານວ່າ ພວກເຂົາຈະທຳລາຍຜູ້ຄົນໃນເມືອງນັ້ນ.

For they knew not that Moroni had fortified, or had built forts of security, for every city in all the land round about; therefore, they marched forward to the land of Noah with a firm determination; yea, their chief captains came forward and took an oath that they would destroy the people of that city.

ສິບສອງ ແຕ່ຈົ່ງເບິ່ງ, ມັນເກີດຄວາມແປກປະຫລາດໃຈຫລາຍທີ່ສຸດແກ່ພວກເຂົາ, ເພາະວ່າເມືອງໂນອາ ຊຶ່ງແຕ່ກ່ອນເຄີຍເປັນບ່ອນທີ່ອ່ອນແອ, ບັດນີ້, ໂດຍໃຊ້ວິທີຂອງໂມໂຣໄນ, ມັນຈຶ່ງກາຍມາເປັນບ່ອນທີ່ເຂັ້ມແຂງ, ແທ້ຈິງແລ້ວ, ມັນມີຄວາມເຂັ້ມແຂງຫລາຍກວ່າເມືອງອຳໂມນໄນຮາອີກຊ້ຳ.

But behold, to their astonishment, the city of Noah, which had hitherto been a weak place, had now, by the means of Moroni, become strong, yea, even to exceed the strength of the city Ammonihah.

ສິບສາມ ແລະ ບັດນີ້, ຈົ່ງເບິ່ງນີ້ຄືປັນຍາຂອງໂມໂຣໄນ; ເພາະເພີ່ນຄິດວ່າເມືອງອຳໂມນໄນຮາ ຈະເຮັດໃຫ້ພວກເຂົາຢ້ານກົວ, ແລະ ໂດຍທີ່ກ່ອນໜ້ານີ້ ເມືອງໂນອາ ເປັນສ່ວນທີ່ອ່ອນແອທີ່ສຸດຂອງແຜ່ນດິນ, ສະນັ້ນພວກເຂົາຈະເດີນທັບໄປສູ້ຮົບທີ່ນັ້ນ, ແລະ ມັນເປັນໄປຕາມຄວາມປາດຖະໜາຂອງເພີ່ນດັ່ງນັ້ນ.

And now, behold, this was wisdom in Moroni; for he had supposed that they would be frightened at the city Ammonihah; and as the city of Noah had hitherto been the weakest part of the land, therefore they would march thither to battle; and thus it was according to his desires.

ແລະ ຈົ່ງເບິ່ງ, ໂມໂຣໄນໄດ້ແຕ່ງຕັ້ງລີໄຮໃຫ້ເປັນຫົວໜ້າທະຫານ ເພື່ອບັງຄັບບັນຊາຜູ້ຄົນຢູ່ໃນເມືອງນັ້ນ; ແລະ ແມ່ນລີ ໄຮ ຜູ້ດຽວກັນນີ້ທີ່ໄດ້ຕໍ່ສູ້ກັບຊາວເລມັນຢູ່ໃນຮ່ອມພູທາງ ຕາເວັນອອກຂອງແມ່ນ້ຳຊີໂດນ.

ແລະ ບັດນີ້ຈົ່ງເບິ່ງ ເຫດການໄດ້ບັງເກີດຂຶ້ນ, ຄືເວລາຊາວເລ ມັນຮູ້ຈັກว่าລີໄຮເປັນຜູ້ບັງຄັບບັນຊາເມືອງນີ້ ພວກເຂົາກໍ ຜິດຫວັງອີກ, ເພາະว่าพวกเขาย้ำนกำลีไรหลายที่สุด; ເຖິງຢ່າງໃດກໍຕາມຫົວໜ້າທະຫານຂອງພວກເຂົາໄດ້ໃຫ້ ຄຳສາບານໄວ້ແລ້ວว่า ພວກເຂົາຈະເຂົ້າໂຈມຕີເມືອງນີ້; ສະນັ້ນ, ພວກເຂົາຈຶ່ງໄດ້ຍົກກອງທັບຂອງພວກເຂົາເຂົ້າມາ.

ບັດນີ້ ຈົ່ງເບິ່ງ, ຊາວເລມັນບໍ່ສາມາດເຂົ້າໄປໃນຄ້າຍຍາມຂອງ ຊາວນີໄຟບໍ່ว่าจะเป็นทางใดกำตาม, ນອກຈາກຈະເປັນທາງ ປະຕູເທົ່ານັ້ນ ຍ້ອນว่าความสูงของคันดู ຊຶ່ງຄູນຂຶ້ນໄວ້ ແລະ ຄວາມເລິກຂອງຕະຄອງ ຊຶ່ງຂຸດໄວ້ໂດຍຮອບ ນອກຈາກແຕ່ທາງ ປະຕູເທົ່ານັ້ນ.

ແລະ ຊາວນີໄຟໄດ້ຕຽມພ້ອມຢູ່ສະເໝີດັ່ງນີ້ທີ່ຈະທຳລາຍທຸກ ຄົນທີ່ພະຍາຍາມປີນຂຶ້ນປ້ອມຍາມທາງອື່ນໂດຍການແກວ່ງ ກ້ອນຫີນ ແລະ ຍິງລູກທະນູໃສ່.

ແລະ ນາຍຍາມໄດ້ຕຽມພ້ອມຢູ່ແບບນີ້, ແທ້ຈິງແລ້ວ, ພວກ ເຂົາເປັນຄົນແຂງແຮງຫລາຍທີ່ສຸດ, ຊຶ່ງຕຽມພ້ອມດ້ວຍດາບ ແລະ ກະຖຸນ, ເພື່ອຈະໄດ້ຟັນທຸກຄົນທີ່ພະຍາຍາມບຸກເຂົ້າມາ ໃນຄ້າຍຍາມທາງປະຕູຂອງພວກເຂົາ; ແລະ ພວກເຂົາໄດ້ຕຽມ ພ້ອມທີ່ຈະສູ້ຮົບກັບຊາວເລມັນດັ່ງນີ້.

ແລະ ເຫດການໄດ້ບັງເກີດຂຶ້ນຄື ນາຍທະຫານຂອງຊາວເລ ມັນໄດ້ຍົກກອງທັບມາຢູ່ໜ້າທາງເຂົ້າ ແລະ ເລີ່ມຕໍ່ສູ້ກັບຊາວນີ ໄຟ, ເພື່ອຈະໄດ້ເຂົ້າໄປໃນຄ້າຍຍາມຂອງພວກເຂົາ; ແຕ່ຈົ່ງເບິ່ງ, ພວກເຂົາຖືກໄລ່ອອກໄປເປັນບາງຄັ້ງ, ເຖິງຂະໜາດທີ່ພວກ ເຂົາຖືກຂ້າຕາຍເປັນຈຳນວນຫລວງຫລາຍ.

ບັດນີ້ເວລາພວກເຂົາເຫັນว่าพวกเขาบ่สามาถเอำชะนะ ຊາວນີໄຟທາງປະຕູເຂົ້າ, ພວກເຂົາຈຶ່ງເລີ່ມຂຸດຄັນຄູຂອງຊາວນີ ໄຟລົງ ເພື່ອຈະໄດ້ມີຫົນທາງເຂົ້າໄປຫາກອງທັບຂອງພວກ ຊາວນີໄຟ, ເພື່ອຈະໄດ້ມີໂອກາດຕໍ່ສູ້ຢ່າງເທົ່າທຽມກັນ; ແຕ່ຈົ່ງ ເບິ່ງ, ໃນຄວາມພະຍາຍາມເຫລົ່ານີ້ ພວກເຂົາຖືກກວາດອອກ ໄປໂດຍກ້ອນຫີນ ແລະ ລູກທະນູ ຊຶ່ງຖືກຍິງມາໃສ່ພວກເຂົາ; ແລະ ແທນທີ່ພວກເຂົາຈະຖົມຮ່ອງພວກນັ້ນໂດຍການພັງດິນ ລົງມາ ມັນກັບເຕັມຂຶ້ນສ່ວນໜຶ່ງດ້ວຍຄົນຕາຍ ແລະ ຄົນບາດ ເຈັບຂອງພວກເຂົາ.

And behold, Moroni had appointed Lehi to be chief captain over the men of that city; and it was that same Lehi who fought with the Lamanites in the valley on the east of the river Sidon.

And now behold it came to pass, that when the Lamanites had found that Lehi commanded the city they were again disappointed, for they feared Lehi exceedingly; nevertheless their chief captains had sworn with an oath to attack the city; therefore, they brought up their armies.

Now behold, the Lamanites could not get into their forts of security by any other way save by the entrance, because of the highness of the bank which had been thrown up, and the depth of the ditch which had been dug round about, save it were by the entrance.

And thus were the Nephites prepared to destroy all such as should attempt to climb up to enter the fort by any other way, by casting over stones and arrows at them.

Thus they were prepared, yea, a body of their strongest men, with their swords and their slings, to smite down all who should attempt to come into their place of security by the place of entrance; and thus were they prepared to defend themselves against the Lamanites.

And it came to pass that the captains of the Lamanites brought up their armies before the place of entrance, and began to contend with the Nephites, to get into their place of security; but behold, they were driven back from time to time, insomuch that they were slain with an immense slaughter.

Now when they found that they could not obtain power over the Nephites by the pass, they began to dig down their banks of earth that they might obtain a pass to their armies, that they might have an equal chance to fight; but behold, in these attempts they were swept off by the stones and arrows which were thrown at them; and instead of filling up their ditches by pulling down the banks of earth, they were filled up in a measure with their dead and wounded bodies.

ດ໓ ແລະ ຊາວນີໄຟຈຶ່ງມີອຳນາດທັງໝົດເໜືອກว่าສັດຕູຂອງ
ພວກເຂົາແບບນີ້; ແລະ ຊາວເລມັນໄດ້ພະຍາຍາມຢູ່ສະເໝີທີ່ຈະ
ທຳລາຍຊາວນີໄຟຈົນว่าຫົວໜ້ານາຍທະຫານຂອງພວກເຂົາ
ຖືກຂ້າຕາຍຈົນໝົດ; ແທ້ຈິງແລ້ວ, ຊາວເລມັນຫລາຍກว่าພັນ
ຄົນຖືກຂ້າຕາຍ, ກົງກັນຂ້າມ, ທາງຝ່ายຊາວນີໄຟບໍ່ມີຈັກຄົນ
ເລີຍຖືກຂ້າຕາຍ.

ດ໔ ມີຢູ່ປະມານຫ້າສິບຄົນເທົ່ານັ້ນໄດ້ຮັບບາດເຈັບ, ຜູ້ຊຶ່ງເປີດ
ຮັບລູກທະນູຂອງຊາວເລມັນທີ່ທາງເຂົ້າ, ແຕ່ພວກເຂົາຖືກ
ປ້ອງກັນໄວ້ດ້ວຍໂລ່ຂອງພວກເຂົາ, ແລະ ແຜ່ນປົກເອິກຂອງ
ພວກເຂົາ, ແລະ ເຄື່ອງປ້ອງກັນຫົວຂອງພວກເຂົາ, ເຖິງ
ຂະໜາດທີ່ພວກເຂົາໄດ້ຮັບບາດເຈັບຢູ່ທີ່ຂາ, ຊຶ່ງຫລາຍຄົນໄດ້
ຮັບບາດເຈັບສາຫັດ.

ດ໕ ແລະ ເຫດການໄດ້ບັງເກີດຂຶ້ນ, ຄືເວລາຊາວເລມັນເຫັນว่า
ຫົວໜ້ານາຍທະຫານຂອງຕົນຖືກຂ້າຕາຍໝົດແລ້ວ ພວກເຂົາ
ຈຶ່ງໄດ້ປົບໜີເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ. ແລະ ເຫດການ
ໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ກັບຄືນໄປຫາແຜ່ນດິນນີໄຟ ເພື່ອ
ແຈ້ງຄວາມກ່ຽວກັບຄວາມເສຍຫາຍອັນໃຫຍ່ຫລວງຂອງຕົນ ຕໍ່
ອະມາລີໄຄຢາຜູ້ເປັນກະສັດຂອງພວກເຂົາ, ຊຶ່ງເປັນຄົນຂອງນີ
ໄຟໂດຍກຳເນີດ.

ດ໖ ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວໄດ້ໂມโหຮ້ายໃຫ້ຜູ້ຄົນ
ຂອງຕົນຫລາຍທີ່ສຸດ, ຍ້ອນว่าລາວບໍ່ໄດ້ບັນລຸຕາມຄວາມ
ປາດຖະໜາຂອງລາວທີ່ມີກັບຊາວນີໄຟ; ເພາະລາວບໍ່ໄດ້ເອົາ
ພວກເຂົາມາສູ່ແອກແຫ່ງຄວາມເປັນທາດ.

ດ໗ ແທ້ຈິງແລ້ວ, ລາວມີຄວາມຄຽດແຄ້ນຫລາຍທີ່ສຸດ, ແລະ
ລາວໄດ້ ສາບແຊ່ງພຣະເจ้า ແລະ ໂມโรไນນຳອີກ, ໂດຍກ່າວ ຄຳ
ສາບານว่า ລາວຈະກິນເລືອດຂອງເພີ່ນ; ແລະ ນີ້ຍ້ອນว่าໂມโร
ไนรักสาพระบัญยัดของพระเจ้าในการตรมพ้อมเพื่อ
ຄວາມປອດໄພຂອງຜູ້ຄົນຂອງເພີ່ນ.

ດ໘ ແລະ ເຫດການໄດ້ບັງເກີດຂຶ້ນຄື ອີກທາງໜຶ່ງຜູ້ຄົນຂອງນີ
ໄຟໄດ້ຖວายความ ขอบพระไทแด่พระเจ้าของพวกเขา,
ເພາະອຳນາດອັນຫາທີ່ປຽບບໍ່ໄດ້ຂອງພຣະອົງໃນການ
ປົດປ່ອຍພວກເຂົາໃຫ້ພົ້ນຈາກກຳມືຂອງສັດຕູຂອງພວກເຂົາ.

ດ໙ ແລະ ປີທີສິບເກົ້າແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້
ຄົນຂອງນີໄຟໄດ້ສິ້ນສຸດລົງດັ່ງນີ້.

Thus the Nephites had all power over their enemies; and thus the Lamanites did attempt to destroy the Nephites until their chief captains were all slain; yea, and more than a thousand of the Lamanites were slain; while, on the other hand, there was not a single soul of the Nephites which was slain.

There were about fifty who were wounded, who had been exposed to the arrows of the Lamanites through the pass, but they were shielded by their shields, and their breastplates, and their head-plates, insomuch that their wounds were upon their legs, many of which were very severe.

And it came to pass, that when the Lamanites saw that their chief captains were all slain they fled into the wilderness. And it came to pass that they returned to the land of Nephi, to inform their king, Amalickiah, who was a Nephite by birth, concerning their great loss.

And it came to pass that he was exceedingly angry with his people, because he had not obtained his desire over the Nephites; he had not subjected them to the yoke of bondage.

Yea, he was exceedingly wroth, and he did curse God, and also Moroni, swearing with an oath that he would drink his blood; and this because Moroni had kept the commandments of God in preparing for the safety of his people.

And it came to pass, that on the other hand, the people of Nephi did thank the Lord their God, because of his matchless power in delivering them from the hands of their enemies.

And thus ended the nineteenth year of the reign of the judges over the people of Nephi.

ແທ້ຈິງແລ້ວ, ແລະ ມັນມີສັນຕິສຸກຕໍ່ເນື່ອງກັນໄປໃນບັນດາ ປະຊາຊົນຂອງນີໄຟ, ແລະ ມີຄວາມຈະເລີນຮຸ່ງເຮືອງຢ່າງຍິ່ງ ຢູ່ໃນສາດສະໜາຈັກ ເພາະວ່າຄວາມເອົາໃຈໃສ່ ແລະ ຄວາມ ພາກພຽນຂອງພວກເຂົາຊຶ່ງມີຕໍ່ພຣະຄຳຂອງພຣະເຈົ້າ ຊຶ່ງ ຮີລາມັນ, ຊິບລັນ, ແລະ ໂຄຣິອານທັນ, ແລະ ອຳໂມນ ແລະ ພີ່ນ້ອງຂອງເພີ່ນໄດ້ປະກາດກັບພວກເຂົາ, ແທ້ຈິງແລ້ວ, ແລະ ໂດຍຄົນທັງໝົດຜູ້ທີ່ໄດ້ຮັບແຕ່ງຕັ້ງໃຫ້ມີ ລະບຽບອັນສັກສິດ ຂອງພຣະເຈົ້າ, ໂດຍການຮັບບັບຕິສະມາໄວ້ກັບການກັບໃຈ, ແລະ ໄດ້ອອກໄປສັ່ງສອນໃນບັນດາຜູ້ຄົນ.

Yea, and there was continual peace among them, and exceedingly great prosperity in the church because of their heed and diligence which they gave unto the word of God, which was declared unto them by Helaman, and Shiblon, and Corianton, and Ammon and his brethren, yea, and by all those who had been ordained by the holy order of God, being baptized unto repentance, and sent forth to preach among the people.

ແອວມາ ๕๐

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນບໍ່ໄດ້ຢຸດຢັ້ງການ
ຕຽມສົງຄາມເພື່ອປ້ອງກັນຜູ້ຄົນຂອງເພິ່ນໃຫ້ພົ້ນຈາກຊາວເລ
ມັນ, ເພາະເພິ່ນໄດ້ສັ່ງໃຫ້ກອງທັບຂອງເພິ່ນເລີ່ມເຮັດວຽກໃນ
ຕົ້ນປີທີຊາວແຫ່ງການປົກຄອງຂອງຜູ້ຕັດສິນ, ຄືພວກ
ທະຫານຄວນຂຸດດິນເຮັດເປັນຄັນຄູໄວ້ຮອບເມືອງຕະຫລອດ
ທົ່ວແຜ່ນດິນທີ່ຊາວນີໄຟເປັນເຈົ້າຂອງ.

๒ ແລະ ເທິງຄັນຄູເຫລົ່ານັ້ນ ເພິ່ນໄດ້ສັ່ງໃຫ້ປັກຫລັກໄມ້ຂຶ້ນ,
ແທ້ຈິງແລ້ວ, ຫລັກໄມ້ເຫລົ່ານັ້ນໃຫ້ສູງເທົ່າກັບຄົນໄວ້ຮອບ
ເມືອງ.

๓ ແລະ ເພິ່ນສັ່ງວ່າ ພວກເຂົາຄວນເຮັດຂອບເປັນໄມ້ແຫລມ
ປັກໄວ້ເທິງຫລັກໄມ້ເຫລົ່ານັ້ນ ແລະ ເຮັດໃຫ້ມັນສູງແຂງແກ່ນ
ທີ່ສຸດ.

๔ ແລະ ເພິ່ນໃຫ້ສ້າງຫໍສູງເພື່ອຈະໄດ້ຫລຽວເຫັນຂ້າມໄມ້
ແຫລມເຫລົ່ານັ້ນໄດ້, ແລະ ເພິ່ນໃຫ້ສ້າງບ່ອນຫລົບໄພໄວ້ເທິງ
ຫໍສູງເຫລົ່ານັ້ນ, ເພື່ອວ່າກ້ອນຫີນ ແລະ ລູກທະນູຂອງຊາວເລ
ມັນຈະເຮັດອັນຕະລາຍໃຫ້ພວກເຂົາບໍ່ໄດ້.

๕ ແລະ ພວກເຂົາກໍຕຽມພ້ອມທີ່ຈະແກວ່ງກ້ອນຫີນຈາກຫໍສູງ
ນັ້ນຕາມຄວາມພໍໃຈ ແລະ ຕາມກຳລັງຂອງພວກເຂົາ, ເພື່ອຈະ
ໄດ້ຂ້າຜູ້ທີ່ພະຍາຍາມເຂົ້າມາໃກ້ກຳແພງເມືອງ.

๖ ໂມໂຣໄນໄດ້ຕຽມທີ່ໝັ້ນໄວ້ຮອບເມືອງທົ່ວແຜ່ນດິນຕາມນີ້
ເພື່ອຕ້ານທານການມາຮຸກຮານຂອງສັດຕູ.

๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນໄດ້ສັ່ງໃຫ້ທະຫານ
ຂອງເພິ່ນອອກໄປໃນຖິ່ນແຫ້ງແລ້ງກັນດານທາງຕາເວັນອອກ;
ແທ້ຈິງແລ້ວ, ກອງທັບເຫລົ່ານີ້ໄດ້ອອກໄປຂັບໄລ່ຊາວເລມັນ
ທັງໝົດທີ່ຢູ່ໃນຖິ່ນແຫ້ງແລ້ງກັນດານທາງຕາເວັນອອກໃຫ້ກັບ
ໄປຫາແຜ່ນດິນຂອງພວກເຂົາເອງ, ຊຶ່ງຢູ່ທາງໃຕ້ຂອງແຜ່ນດິນ
ເຊຣາເຮັມລາ.

๘ ແລະ ແຜ່ນດິນນີໄຟໄດ້ຍາວຢຽດຊື່ໄປຈາກທະເລທາງຕາເວັນ
ອອກເຖິງທາງຕາເວັນຕົກ.

Alma 50

And now it came to pass that Moroni did not stop making preparations for war, or to defend his people against the Lamanites; for he caused that his armies should commence in the commencement of the twentieth year of the reign of the judges, that they should commence in digging up heaps of earth round about all the cities, throughout all the land which was possessed by the Nephites.

And upon the top of these ridges of earth he caused that there should be timbers, yea, works of timbers built up to the height of a man, round about the cities.

And he caused that upon those works of timbers there should be a frame of pickets built upon the timbers round about; and they were strong and high.

And he caused towers to be erected that overlooked those works of pickets, and he caused places of security to be built upon those towers, that the stones and the arrows of the Lamanites could not hurt them.

And they were prepared that they could cast stones from the top thereof, according to their pleasure and their strength, and slay him who should attempt to approach near the walls of the city.

Thus Moroni did prepare strongholds against the coming of their enemies, round about every city in all the land.

And it came to pass that Moroni caused that his armies should go forth into the east wilderness; yea, and they went forth and drove all the Lamanites who were in the east wilderness into their own lands, which were south of the land of Zarahemla.

And the land of Nephi did run in a straight course from the east sea to the west.

ຈ ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາໂມໂຣໄນໄດ້ຂັບໄລ່ຊາວ
ເລມັນທັງໝົດອອກຈາກຖິ່ນແຫ້ງແລ້ງກັນດານທາງຕາເວັນ
ອອກ ຊຶ່ງຢູ່ທາງເໜືອຂອງແຜ່ນດິນຕ່າງໆ ຊຶ່ງເປັນແຜ່ນດິນ
ຂອງພວກເຂົາເອງແລ້ວ, ເພິ່ນໄດ້ໃຫ້ຜູ້ອາໄສທີ່ຢູ່ໃນແຜ່ນດິນ
ເຊຣາເຮັມລາ ແລະ ທີ່ຢູ່ໃນແຜ່ນດິນອ້ອມແອ້ມນັ້ນເຂົ້າໄປໃນຖິ່ນ
ແຫ້ງແລ້ງກັນດານທາງຕາເວັນອອກຈົນເຖິງຊາຍແດນໃກ້ຝັ່ງ
ທະເລ ແລະ ເຂົ້າໄປເປັນເຈົ້າຂອງແຜ່ນດິນນັ້ນ.

ຊ ແລະ ເພິ່ນໄດ້ວາງກອງທັບໄວ້ທາງໃຕ້ໃນຊາຍແດນຂອງ
ພວກເຂົານຳອີກ, ແລະ ໃຫ້ພວກເຂົາສ້າງ ບ່ອນປ້ອງກັນຂຶ້ນ
ເພື່ອຈະໄດ້ເຮັດໃຫ້ກອງທັບ ແລະ ຜູ້ຄົນຂອງພວກເຂົາປອດໄພ
ຈາກກຳມືຂອງສັດຕູຂອງພວກເຂົາ.

ຊສ ແລະ ເພິ່ນໄດ້ຕັດທີ່ໝັ້ນທັງໝົດຂອງຊາວເລມັນຢູ່ໃນຖິ່ນ
ແຫ້ງແລ້ງກັນດານທາງຕາເວັນອອກດັ່ງນີ້, ແທ້ຈິງແລ້ວ, ທັງ
ທາງຕາເວັນຕົກນຳອີກ, ໂດຍການເສີມກຳລັງແຍກທາງໄວ້ລະ
ຫວ່າງຊາວນີໄຟ ແລະ ຊາວເລມັນ, ລະຫວ່າງແຜ່ນດິນເຊຣາ
ເຮັມລາ ແລະ ແຜ່ນດິນນີໄຟ, ຈາກທະເລທາງຕາເວັນຕົກໄປ
ເຖິງຫົວແມ່ນ້ຳຊີໂດນ—ຊາວນີໄຟໄດ້ເປັນເຈົ້າຂອງແຜ່ນດິນ
ທັງໝົດທາງເໜືອໄດ້ຕາມໃຈຊອບ, ແທ້ຈິງແລ້ວ, ລວມທັງ
ແຜ່ນດິນທັງໝົດ ຊຶ່ງຢູ່ທາງເໜືອຂອງແຜ່ນດິນອຸດົມສົມບູນ.

ຊແ ດ້ວຍເຫດນີ້ ໂມໂຣໄນພ້ອມກຳລັງກອງທັບຂອງເພິ່ນຈຶ່ງມີ
ກຳລັງເພີ່ມຂຶ້ນທຸກໆມື້ ເພາະວ່າຄວາມໝັ້ນໃຈໃນການຄຸ້ມກັນ
ຊຶ່ງຜົນງານຂອງເພິ່ນໄດ້ນຳອອກມາໃຫ້ພວກເຂົາເຫັນໄດ້ວ່າ
ເພິ່ນກຳລັງຕັດກຳລັງ ແລະ ອຳນາດຂອງຊາວເລມັນອອກຈາກ
ແຜ່ນດິນຊຶ່ງເປັນຂອງພວກເຂົາ, ເພື່ອບໍ່ໃຫ້ພວກເຂົາມີອຳນາດ
ປົກຄອງແຜ່ນດິນຂອງພວກເຂົາ.

ຊມ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວນີໄຟໄດ້ເລີ່ມສ້າງເມືອງ
ໜຶ່ງຂຶ້ນ, ແລະ ພວກເຂົາເອີ້ນເມືອງນັ້ນວ່າ ໂມໂຣໄນ; ແລະ ມັນ
ຕັ້ງຢູ່ໃກ້ທະເລທາງຕາເວັນອອກ; ແລະ ມັນຢູ່ທາງໃຕ້ໃກ້ກັບ
ເສັ້ນເຂດແດນແຜ່ນດິນຂອງຊາວເລມັນ.

ຊມ ແລະ ພວກເຂົາໄດ້ເລີ່ມສ້າງເມືອງໜຶ່ງຂຶ້ນອີກ ຊຶ່ງຕັ້ງຢູ່
ລະຫວ່າງເມືອງໂມໂຣໄນກັບເມືອງອາໂຣນ, ໂດຍເຊື່ອມໂຍງ
ຊາຍແດນເມືອງອາໂຣນກັບເມືອງໂມໂຣໄນເຂົ້າກັນ; ແລະ ພວກ
ເຂົາເອີ້ນຊື່ເມືອງ ຫລື ແຜ່ນດິນນີ້ວ່າ ນີໄຟຮາ.

ຊມ ແລະ ໃນປີດຽວກັນນັ້ນ ພວກເຂົາກໍໄດ້ເລີ່ມສ້າງເມືອງຂຶ້ນ
ຫລາຍແຫ່ງທາງເໜືອນຳອີກ, ແລະ ເມືອງໜຶ່ງຖືກສ້າງຂຶ້ນ
ດ້ວຍວິທີພິເສດ ຊຶ່ງເອີ້ນວ່າ ລີໄຮ, ຊຶ່ງຢູ່ທາງເໜືອໃກ້ກັບຝັ່ງ
ທະເລ.

ຊສ ແລະ ປີທີຊາວໄດ້ສິ້ນສຸດລົງດັ່ງນີ້.

And it came to pass that when Moroni had driven all the Lamanites out of the east wilderness, which was north of the lands of their own possessions, he caused that the inhabitants who were in the land of Zarahemla and in the land round about should go forth into the east wilderness, even to the borders by the seashore, and possess the land.

And he also placed armies on the south, in the borders of their possessions, and caused them to erect fortifications that they might secure their armies and their people from the hands of their enemies.

And thus he cut off all the strongholds of the Lamanites in the east wilderness, yea, and also on the west, fortifying the line between the Nephites and the Lamanites, between the land of Zarahemla and the land of Nephi, from the west sea, running by the head of the river Sidon—the Nephites possessing all the land northward, yea, even all the land which was northward of the land Bountiful, according to their pleasure.

Thus Moroni, with his armies, which did increase daily because of the assurance of protection which his works did bring forth unto them, did seek to cut off the strength and the power of the Lamanites from off the lands of their possessions, that they should have no power upon the lands of their possession.

And it came to pass that the Nephites began the foundation of a city, and they called the name of the city Moroni; and it was by the east sea; and it was on the south by the line of the possessions of the Lamanites.

And they also began a foundation for a city between the city of Moroni and the city of Aaron, joining the borders of Aaron and Moroni; and they called the name of the city, or the land, Nephihah.

And they also began in that same year to build many cities on the north, one in a particular manner which they called Lehi, which was in the north by the borders of the seashore.

And thus ended the twentieth year.

ແລະ ຜູ້ຄົນຂອງນີໄຟຢູ່ໃນສະພາບທີ່ຈະເລີນຮຸ່ງເຮືອງ

ຕົ້ນປີທີຊາວເອັດແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນນີ
ໄຟ.

ແລະ ພວກເຂົາໄດ້ຈະເລີນຮຸ່ງເຮືອງຢ່າງຍິ່ງ ແລະ ກາຍເປັນ
ຄົນຮັ່ງມີຢ່າງຍິ່ງ; ແທ້ຈິງແລ້ວ, ພວກເຂົາໄດ້ມີຄົນເພີ່ມທະວີຂຶ້ນ
ແລະ ໄດ້ພັດທະນາຫລາຍຂຶ້ນໃນແຜ່ນດິນ.

ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າ ພຣະຜູ້ເປັນເຈົ້າມີຄວາມ
ເມດຕາປານີ ແລະ ມີຄວາມຍຸດຕິທຳຫລາຍປານໃດ ເພື່ອ
ພຣະອົງຈະໄດ້ສຳເລັດໃນພຣະຄຳທັງໝົດຂອງພຣະອົງ ຊຶ່ງໄດ້
ສັນຍາໄວ້ກັບລູກຫລານມະນຸດ; ແທ້ຈິງແລ້ວ, ພວກເຮົາເຫັນໄດ້
ວ່າ ໃນເວລານີ້ພຣະຄຳຂອງພຣະອົງປະກົດເປັນຈິງຂຶ້ນແລ້ວ,
ຊຶ່ງພຣະອົງໄດ້ກ່າວໄວ້ກັບລີໄຮວ່າ:

ເຈົ້າ ແລະ ລູກຫລານຂອງເຈົ້າເປັນສຸກແລ້ວ; ແລະ ພວກເຂົາ
ຈະໄດ້ຮັບພອນ, ຕາບໃດທີ່ພວກເຂົາຈະຮັກສາບັນຍັດຂອງເຮົາ
ພວກເຂົາຈະຮຸ່ງເຮືອງຢູ່ໃນແຜ່ນດິນ. ແຕ່ຈົ່ງຈຳໄວ້ວ່າ, ຕາບໃດ
ທີ່ພວກເຂົາຈະບໍ່ຮັກສາບັນຍັດຂອງເຮົາ ພວກເຂົາຈະຖືກ ຕັດ
ອອກຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ.

ແລະ ພວກເຮົາຈຶ່ງເຫັນໄດ້ວ່າ ຄຳສັນຍາເຫລົ່ານີ້ປະກົດເປັນ
ຈິງກັບຜູ້ຄົນຂອງນີໄຟແລ້ວ; ເພາະວ່າເປັນການຜິດພາດ ແລະ
ການຂັດແຍ້ງກັນຂອງພວກເຂົາ, ແທ້ຈິງແລ້ວ, ການຄາດຕະກຳ
ຂອງພວກເຂົາ, ການປຸ້ນຈີ້ຂອງພວກເຂົາ, ການນັບຖືຮູບບູຊາ
ຂອງພວກເຂົາ, ການໂສເພນີຂອງພວກເຂົາ, ແລະ ຄວາມໜ້າ
ກຽດຊັງຂອງພວກເຂົາ, ທີ່ມີຢູ່ໃນບັນດາພວກເຂົາເອງ, ຊຶ່ງມັນ
ໄດ້ນຳເອົາສົງຄາມ ແລະ ຄວາມພິນາດມາສູ່ຄົນ.

ແລະ ຄົນທີ່ຊື່ສັດໃນການຮັກສາພຣະບັນຍັດຂອງພຣະເຈົ້າໄດ້
ຖືກປົດປ່ອຍຢູ່ສະເໝີ, ຂະນະທີ່ພີ່ນ້ອງທີ່ຊົ່ວຮ້າຍຂອງພວກ
ເຂົາເປັນພັນໆຄົນຖືກສົ່ງໄປສູ່ຄວາມເປັນທາດ, ຫລື ຕາຍດ້ວຍ
ດາບ, ຫລື ເສື່ອມໂຊມຢູ່ໃນຄວາມບໍ່ເຊື່ອຖື, ແລະ ເຂົ້າໄປສົມທົບ
ກັບຊາວເລມັນ.

ແຕ່ຈົ່ງເບິ່ງ ນັບຕັ້ງແຕ່ວັນເວລາຂອງນີໄຟເປັນຕົ້ນມາ, ມັນບໍ່
ເຄີຍມີເວລາໃດເລີຍທີ່ ສະຫງົບສຸກຢູ່ໃນບັນດາຜູ້ຄົນຂອງນີໄຟ
ເກີນກວ່າໃນວັນເວລາຂອງໂມໂຣໄນ, ແທ້ຈິງແລ້ວ, ເວລານີ້ເປັນ
ປີທີຊາວເອັດແຫ່ງການປົກຄອງຂອງຜູ້ຕັດສິນ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີຊາວສອງແຫ່ງການ
ປົກຄອງຂອງຜູ້ຕັດສິນໄດ້ສິ້ນສຸດລົງດ້ວຍສັນຕິສຸກ ແລະ ປີທີ
ຊາວສາມກໍຄືກັນ.

And in these prosperous circumstances were the people of Nephi in the commencement of the twenty and first year of the reign of the judges over the people of Nephi.

And they did prosper exceedingly, and they became exceedingly rich; yea, and they did multiply and wax strong in the land.

And thus we see how merciful and just are all the dealings of the Lord, to the fulfilling of all his words unto the children of men; yea, we can behold that his words are verified, even at this time, which he spake unto Lehi, saying:

Blessed art thou and thy children; and they shall be blessed, inasmuch as they shall keep my commandments they shall prosper in the land. But remember, inasmuch as they will not keep my commandments they shall be cut off from the presence of the Lord.

And we see that these promises have been verified to the people of Nephi; for it has been their quarrelings and their contentions, yea, their murderings, and their plunderings, their idolatry, their whoredoms, and their abominations, which were among themselves, which brought upon them their wars and their destructions.

And those who were faithful in keeping the commandments of the Lord were delivered at all times, whilst thousands of their wicked brethren have been consigned to bondage, or to perish by the sword, or to dwindle in unbelief, and mingle with the Lamanites.

But behold there never was a happier time among the people of Nephi, since the days of Nephi, than in the days of Moroni, yea, even at this time, in the twenty and first year of the reign of the judges.

And it came to pass that the twenty and second year of the reign of the judges also ended in peace; yea, and also the twenty and third year.

ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນຕົ້ນປີທີຊາວສີ່ແຫ່ງການ ປົກຄອງຂອງຜູ້ຕັດສິນ, ມັນມີສັນຕິສຸກຢູ່ໃນບັນດາຜູ້ຄົນຂອງນີ ໄຟອີກ ຖ້າຫາກມັນບໍ່ໄດ້ມີ ການຂັດແຍ້ງກັນເກີດຂຶ້ນໃນບັນດາ ຜູ້ຄົນຢູ່ໃນແຜ່ນດິນລີໄຮ, ແລະ ຜູ້ຄົນຢູ່ໃນແຜ່ນດິນໂມຣິອານ ທັນ, ຊຶ່ງຢູ່ຕິດຊາຍແດນລີໄຮ; ຊຶ່ງແຜ່ນດິນທັງສອງນີ້ມີ ຊາຍແດນຕິດກັບຝັ່ງທະເລ.

ເພາະຈົ່ງເບິ່ງ, ຜູ້ຄົນທີ່ເປັນເຈົ້າຂອງແຜ່ນດິນໂມຣິອານທັນ ໄດ້ຮຽກຮ້ອງເອົາສິດທິສ່ວນໜຶ່ງຂອງແຜ່ນດິນລີໄຮ; ສະນັ້ນ ມັນຈຶ່ງເລີ່ມມີການຂັດແຍ້ງກັນຂຶ້ນຫລາຍພໍສົມຄວນລະຫວ່າງ ພວກເຂົາເອງ, ເຖິງຂະໜາດທີ່ຜູ້ຄົນຂອງໂມຣິອານທັນຈັບ ອາວຸດຂຶ້ນຕໍ່ສູ້ກັບພີ່ນ້ອງຂອງພວກເຂົາເອງ, ແລະ ຕັ້ງໃຈຈະຂ້າ ພວກເຂົາຖິ້ມດ້ວຍດາບ.

ແຕ່ຈົ່ງເບິ່ງ, ຜູ້ຄົນຊຶ່ງເປັນເຈົ້າຂອງແຜ່ນດິນລີໄຮໄດ້ໜີໄປ ເຂົ້າຄ້າຍຂອງໂມໂຣໄນ, ແລະ ວິງວອນຂໍຄວາມຊ່ວຍເຫລືອຈາກ ເພີ່ນ; ເພາະວ່າພວກເຂົາບໍ່ໄດ້ເປັນຝ່າຍຜິດ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາຜູ້ຄົນຂອງໂມຣິອານ ທັນ, ຊຶ່ງຜູ້ນຳຊື່ວ່າ ໂມຣິອານທັນໄດ້ຍິນວ່າຜູ້ຄົນຂອງລີໄຮໄດ້ໜີ ເຂົ້າໄປຄ້າຍຂອງໂມໂຣໄນ, ພວກເຂົາຈຶ່ງມີຄວາມຢ້ານກົວຫລາຍ ເພາະຢ້ານວ່າກອງທັບຂອງໂມໂຣໄນຈະມາໂຈມຕີພວກເຂົາ ແລະ ທຳລາຍພວກເຂົາ.

ສະນັ້ນ, ໂມຣິອານທັນຈຶ່ງໃຫ້ຄົນເຫລົ່ານັ້ນຈຳໃສ່ໃຈວ່າຕ້ອງ ໜີໄປຫາແຜ່ນດິນທີ່ຢູ່ທາງເໜືອ, ຊຶ່ງມັນມີແມ່ນ້ຳອັນກວ້າງ ໃຫຍ່ປົກຄຸມຢູ່, ເພື່ອຈະໄດ້ເຂົ້າໄປເປັນເຈົ້າຂອງແຜ່ນດິນຊຶ່ງຢູ່ ທາງເໜືອນັ້ນ.

ແລະ ຈົ່ງເບິ່ງ, ພວກເຂົາເຮັດໃຫ້ແຜນການນີ້ເປັນ ຜົນສຳເລັດ, (ຊຶ່ງເປັນເຫດໃຫ້ມີການເສົ້າສະຫລົດໃຈເກີດຂຶ້ນ) ແຕ່ຈົ່ງເບິ່ງ, ໂມຣິອານທັນໂດຍທີ່ເປັນຄົນທະເຍີທະຍານ, ສະນັ້ນ ລາວຈຶ່ງໃຈຮ້າຍໃຫ້ຂ້າໃຊ້ຜູ້ຍິງຄົນໜຶ່ງຂອງລາວ, ແລະ ໄດ້ທຸບຕີ ນາງຢ່າງສາຫັດ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ນາງໄດ້ລັກໜີ, ແລະ ຂ້າມ ໄປຫາຄ້າຍຂອງໂມໂຣໄນ, ແລະ ບອກໃຫ້ໂມໂຣໄນຮູ້ທຸກສິ່ງທຸກ ຢ່າງກ່ຽວກັບເລື່ອງທີ່ເກີດຂຶ້ນ, ແລະ ເຈດຕະນາຂອງພວກເຂົາ ວ່າ ພວກເຂົາຈະໜີໄປຫາແຜ່ນດິນທາງເໜືອ.

And it came to pass that in the commencement of the twenty and fourth year of the reign of the judges, there would also have been peace among the people of Nephi had it not been for a contention which took place among them concerning the land of Lehi, and the land of Morianton, which joined upon the borders of Lehi; both of which were on the borders by the seashore.

For behold, the people who possessed the land of Morianton did claim a part of the land of Lehi; therefore there began to be a warm contention between them, insomuch that the people of Morianton took up arms against their brethren, and they were determined by the sword to slay them.

But behold, the people who possessed the land of Lehi fled to the camp of Moroni, and appealed unto him for assistance; for behold they were not in the wrong.

And it came to pass that when the people of Morianton, who were led by a man whose name was Morianton, found that the people of Lehi had fled to the camp of Moroni, they were exceedingly fearful lest the army of Moroni should come upon them and destroy them.

Therefore, Morianton put it into their hearts that they should flee to the land which was northward, which was covered with large bodies of water, and take possession of the land which was northward.

And behold, they would have carried this plan into effect, (which would have been a cause to have been lamented) but behold, Morianton being a man of much passion, therefore he was angry with one of his maid servants, and he fell upon her and beat her much.

And it came to pass that she fled, and came over to the camp of Moroni, and told Moroni all things concerning the matter, and also concerning their intentions to flee into the land northward.

ນ໕໘ ບັດນີ້ຈົ່ງເບິ່ງ, ຜູ້ຄົນຊຶ່ງຢູ່ໃນແຜ່ນດິນອຸດົມສົມບູນ, ຫລື ຄວາມຈິງແລ້ວໂມໂຣໄນຢ້ານວ່າຜູ້ຄົນຈະເຊື່ອຟັງຄຳເວົ້າຂອງໂມ ຣິອານທັນ ແລະ ຈະເຂົ້າໄປຮ່ວມກັບພວກເຂົາ, ແລະ ພວກເຂົາ ຈະໄດ້ເປັນເຈົ້າຂອງແຜ່ນດິນແຫ່ງຕ່າງໆ, ເພາະມັນອາດຈະເປັນ ພື້ນຖານໃຫ້ເກີດຜົນຮ້າຍໃນບັນດາຜູ້ຄົນຂອງນີໄຟ, ດັ່ງນັ້ນ, ຜົນຮ້າຍນັ້ນຈະນຳໄປຫາການລົບລ້າງ ເສລີພາບຂອງພວກ ເຂົາ.

Now behold, the people who were in the land Bountiful, or rather Moroni, feared that they would hearken to the words of Morianton and unite with his people, and thus he would obtain possession of those parts of the land, which would lay a foundation for serious consequences among the people of Nephi, yea, which consequences would lead to the overthrow of their liberty.

ນ໕ນ ສະນັ້ນ ໂມໂຣໄນຈຶ່ງໄດ້ສົ່ງກອງທັບຂອງພວກເຂົາໄປ, ເພື່ອ ສະກັດຜູ້ຄົນຂອງໂມຣິອານທັນໃຫ້ຢຸດການໜີໄປຫາແຜ່ນດິນ ທາງເໜືອ.

Therefore Moroni sent an army, with their camp, to head the people of Morianton, to stop their flight into the land northward.

ນ໕໔ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກທະຫານບໍ່ໄດ້ສະກັດ ພວກເຂົາ ຈົນວ່າພວກເຂົາມາເຖິງຊາຍແດນຂອງແຜ່ນດິນ ຮ້າງ; ແລະ ບ່ອນນັ້ນພວກທະຫານໄດ້ສະກັດພວກເຂົາໃກ້ທາງ ແຄບບ່ອນໜຶ່ງ ຊຶ່ງຢູ່ລຽບຝັ່ງທະເລໄປຫາແຜ່ນດິນທາງເໜືອ, ແທ້ຈິງແລ້ວ, ໃກ້ທະເລທາງຕາເວັນຕົກ ແລະ ທາງຕາເວັນ ອອກ.

And it came to pass that they did not head them until they had come to the borders of the land Desolation; and there they did head them, by the narrow pass which led by the sea into the land northward, yea, by the sea, on the west and on the east.

ນ໕໕ ແລະ ເຫດການໄດ້ບັງເກີດຂຶ້ນຄື ກອງທັບທີ່ໂມໂຣໄນສົ່ງໄປ ນັ້ນໄດ້ຖືກນຳພາໂດຍຄົນຜູ້ໜຶ່ງຊື່ວ່າ ທີອານຄຳ, ແລະ ໄດ້ພົບ ກັບຜູ້ຄົນຂອງໂມຣິອານທັນ; ແລະ ຜູ້ຄົນຂອງໂມຣິອານທັນນີ້ ເປັນຄົນດື້ດ້ານຫລາຍທີ່ສຸດ, (ໂດຍຖືກຈູງໃຈດ້ວຍຄວາມ ຊົ່ວຮ້າຍ ແລະ ຄຳຍົກຍ້ອງຂອງລາວ) ຈົນວ່າມີການສູ້ຮົບ ເກີດຂຶ້ນລະຫວ່າງຄົນເຫລົ່ານີ້, ຈຶ່ງເປັນເຫດໃຫ້ທີອານຄຳຂ້າໂມ ຣິອານທັນ, ແລະ ທີອານຄຳໄດ້ນຳເອົາພວກເຂົາມາເປັນຊະເລີຍ ແລະ ກັບຄືນໄປຄ້າຍຂອງໂມໂຣໄນ. ແລະ ປີທີຊາວສີ່ແຫ່ງການ ປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນສຸດລົງດັ່ງນີ້.

And it came to pass that the army which was sent by Moroni, which was led by a man whose name was Teancum, did meet the people of Morianton; and so stubborn were the people of Morianton, (being inspired by his wickedness and his flattering words) that a battle commenced between them, in the which Teancum did slay Morianton and defeat his army, and took them prisoners, and returned to the camp of Moroni. And thus ended the twenty and fourth year of the reign of the judges over the people of Nephi.

ນ໕ຜ ແລະ ຜູ້ຄົນຂອງໂມຣິອານທັນໄດ້ຖືກນຳເອົາກັບຄືນມາດັ່ງນີ້. ແລະ ພວກເຂົາໃຫ້ເຮັດຄຳໝັ້ນສັນຍາວ່າ ຈະຮັກສາສັນຕິພາບ ຂອງພວກເຂົາໄວ້ ແລະ ພວກເຂົາຖືກນຳກັບຄືນໄປຫາແຜ່ນດິນ ໂມຣິອານທັນຄືເກົ່າ, ແລະ ການຮ່ວມກັນລະຫວ່າງພວກເຂົາ ກັບຜູ້ຄົນຂອງລີໄຮກໍເກີດຂຶ້ນ; ແລະ ພວກເຂົາກໍຖືກນຳກັບຄືນສູ່ ແຜ່ນດິນຂອງຕົນຄືເກົ່າ.

And thus were the people of Morianton brought back. And upon their covenanting to keep the peace they were restored to the land of Morianton, and a union took place between them and the people of Lehi; and they were also restored to their lands.

ນ໕໗ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີດຽວກັນນີ້ຜູ້ຄົນຂອງນີ ໄຟກໍໄດ້ມີສັນຕິສຸກກັບຄືນມາຫາຕົນເອງເໝືອນເດີມ, ຄືນີໄຟ ຮາຜູ້ເປັນຫົວໜ້າຜູ້ຕັດສິນຄົນທີສອງໄດ້ສິ້ນຊີວິດໄປ, ໂດຍໄດ້ ກະທຳໜ້າທີ່ໃນບັນລັງຕັດສິນດ້ວຍຄວາມຮອບຄອບຢ່າງ ສົມບູນຕໍ່ພຣະພັກຂອງພຣະເຈົ້າ.

And it came to pass that in the same year that the people of Nephi had peace restored unto them, that Nephihah, the second chief judge, died, having filled the judgment-seat with perfect uprightness before God.

ມ໗ ເຖິງຢ່າງໃດກໍຕາມ, ເພີ່ນໄດ້ປະຕິເສດທີ່ຈະຮັບເອົາບັນທຶກ ເຫລົ່ານັ້ນຈາກແອວມາ ແລະ ສິ່ງເຫລົ່ານັ້ນ ຊຶ່ງແອວມາ ແລະ ບັນພະບຸລຸດຂອງເພີ່ນຖືວ່າສັກສິດທີ່ສຸດ; ສະນັ້ນ ແອວມາຈຶ່ງ ໄດ້ມອບມັນໄວ້ກັບຮີລາມັນລູກຊາຍຂອງເພີ່ນ.

ມ໙ ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນຄື ລູກຊາຍຂອງນີໄຟຮາໄດ້ ຖືກແຕ່ງຕັ້ງໃຫ້ຮັບໜ້າທີ່ນັ່ງບັນລັງຕັດສິນແທນພໍ່ຂອງເພີ່ນ; ແທ້ຈິງແລ້ວ, ເພີ່ນຖືກແຕ່ງຕັ້ງໃຫ້ເປັນຫົວໜ້າຜູ້ຕັດສິນ ແລະ ຜູ້ປົກຄອງຜູ້ຄົນດ້ວຍຄຳສາບານ ແລະ ພິທີການອັນສັກສິດທີ່ ຈະຕັດສິນໂດຍຄວາມຊອບທຳ, ແລະ ຈະຮັກສາສັນຕິພາບ ແລະ ອິດສະລະພາບຂອງຜູ້ຄົນ, ແລະ ຈະໃຫ້ສິດທິອັນສັກສິດຂອງ ພວກເຂົາໃນການນະມັດສະການພຣະຜູ້ເປັນເຈົ້າອົງເປັນ ພຣະເຈົ້າຂອງພວກເຂົາ, ແທ້ຈິງແລ້ວ, ໃນການສະໜັບສະໜູນ ແລະ ດຳລົງຮັກສາອຸດົມການຂອງພຣະເຈົ້າຕະຫລອດວັນເວລາ ຂອງເພີ່ນ, ແລະ ໃນການນຳຄົນຊົ່ວມາສູ່ຄວາມຍຸດຕິທຳຕາມ ການກະທຳຄວາມຜິດຂອງພວກເຂົາ.

ຕ໐ ບັດນີ້ຈົ່ງເບິ່ງ, ເພີ່ນມີຊື່ວ່າ ເພໂຮຣັນ. ແລະ ເພໂຮຣັນກໍໄດ້ຮັບ ເອົາຕຳແໜ່ງຈາກບິດາຂອງເພີ່ນ ແລະ ໄດ້ເລີ່ມການປົກຄອງ ຂອງເພີ່ນໃນທ້າຍປີທີຊາວສີ່ເພື່ອດູແລຜູ້ຄົນຂອງນີໄຟ.

Nevertheless, he had refused Alma to take possession of those records and those things which were esteemed by Alma and his fathers to be most sacred; therefore Alma had conferred them upon his son, Helaman.

Behold, it came to pass that the son of Nephihah was appointed to fill the judgment-seat, in the stead of his father; yea, he was appointed chief judge and governor over the people, with an oath and sacred ordinance to judge righteously, and to keep the peace and the freedom of the people, and to grant unto them their sacred privileges to worship the Lord their God, yea, to support and maintain the cause of God all his days, and to bring the wicked to justice according to their crime.

Now behold, his name was Pahoran. And Pahoran did fill the seat of his father, and did commence his reign in the end of the twenty and fourth year, over the people of Nephi.

ແອວມາ ๕๑

๑ ແລະ ເຫດການໄດ້ບັງເກີດຂຶ້ນໃນຕົ້ນປີທີຊາວຫ້າແຫ່ງການ ປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ, ມັນໄດ້ມີການ ສະຖາປະນາສັນຕິພາບລະຫວ່າງຜູ້ຄົນຂອງລີໄຮ ແລະ ຜູ້ຄົນ ຂອງໂມຣິອານທັນກ່ຽວກັບແຜ່ນດິນຂອງພວກເຂົາ, ແລະ ກໍ ເລີ່ມຕົ້ນປີທີຊາວຫ້າດ້ວຍສັນຕິສຸກດັ່ງນີ້.

๒ ເຖິງຢ່າງໃດກໍຕາມ, ສັນຕິສຸກນັ້ນບໍ່ຍືນຍາວໃນແຜ່ນດິນເລີຍ, ເພາະວ່າມັນເລີ່ມມີການຂັດແຍ້ງກັນຂຶ້ນໃນບັນດາຜູ້ຄົນ ກ່ຽວກັບຫົວໜ້າຜູ້ຕັດສິນເພ�โธຣັນ; ເພາະຈົ່ງເບິ່ງ, ຄົນສ່ວນ ໜຶ່ງປາດຖະໜາຢາກປ່ຽນແປງຂໍ້ຄວາມສອງສາມຂໍ້ຢູ່ໃນ ກົດໝາຍ.

๓ ແຕ່ຈົ່ງເບິ່ງ, ເພโธຣັນບໍ່ຍອມປ່ຽນແປງ ຫລື ຍອມໃຫ້ ກົດໝາຍນັ້ນປ່ຽນແປງໄປ; ສະນັ້ນ, ເພິ່ນຈຶ່ງບໍ່ເຊື່ອຟັງພວກທີ່ ສົ່ງໃບຄຳຮ້ອງມາກ່ຽວກັບການປ່ຽນແປງກົດໝາຍນີ້.

๔ ສະນັ້ນ, ພວກທີ່ປາດຖະໜາຢາກປ່ຽນແປງກົດຈຶ່ງຄຽດ ແຄ້ນໃຫ້ເພິ່ນ, ແລະ ບໍ່ຢາກໃຫ້ເພິ່ນເປັນຫົວໜ້າຜູ້ຕັດສິນ ປົກຄອງແຜ່ນດິນອີກຕໍ່ໄປ; ສະນັ້ນ ມັນຈຶ່ງມີການ�โต້ຖຽງກັນ ຂຶ້ນກ່ຽວກັບເລື່ອງນີ້, ແຕ່ບໍ່ເຖິງຂັ້ນມີການນອງເລືອດກັນ.

๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກທີ່ປາດຖະໜາຈະໃຫ້ ເພโธຣັນຖືກປົດອອກຈາກບັນລັງຕັດສິນຖືກເອີ້ນວ່າກຸ່ມນິຍົມ ກະສັດ, ເພາະວ່າພວກເຂົາຕ້ອງການທີ່ຈະປ່ຽນແປງກົດໝາຍ ໃນວິທີທີ່ຈະ�โค່ນລົ້ມການປົກຄອງແບບອິດສະລະ ແລະ ເພື່ອຈະ ໄດ້ສະຖາປະນາໃຫ້ມີກະສັດຂຶ້ນປົກຄອງແຜ່ນດິນ.

๖ ແລະ ຜູ້ທີ່ປາດຖະໜາໃຫ້ເພโธຣັນເປັນຫົວໜ້າຕັດສິນ ປົກຄອງແຜ່ນດິນຕໍ່ໄປກໍຮັບເອົາຊື່ວ່າ ກຸ່ມອິດສະລະ, ແລະ ການ ແບ່ງແຍກໃນບັນດາພວກເຂົາຈຶ່ງເປັນໄປແບບນີ້, ເພາະກຸ່ມ ອິດສະລະໄດ້ສາບານ ຫລື ໃຫ້ພັນທະສັນຍາວ່າ ພວກເຂົາຈະ ດຳລົງຮັກສາສິດທິຂອງພວກເຂົາ ແລະ ສິດທິພິເສດຂອງ ສາດສະໜາຂອງພວກເຂົາ ໂດຍການປົກຄອງແບບອິດສະລະ.

๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ເລື່ອງທີ່ພວກເຂົາຂັດແຍ້ງ ກັນນັ້ນໄດ້ມາຕົກລົງກັນໄດ້ໂດຍສຽງຂອງຜູ້ຄົນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ສຽງຂອງຜູ້ຄົນມາທາງຂ້າງກຸ່ມ ອິດສະລະ, ແລະ ເພโธຣັນຈຶ່ງໄດ້ຢູ່ໃນບັນລັງຕັດສິນຕໍ່ໄປ ຊຶ່ງ ເຮັດໃຫ້ຜູ້ຄົນຊົ່ນຊົມຫລາຍໃນບັນດາພີ່ນ້ອງຂອງເພโธຣັນ ແລະ ຜູ້ຄົນຢ່າງຫລວງຫລາຍທີ່ຢູ່ໃນເສລີພາບກໍຊົ່ນຊົມຄືກັນ, ຊຶ່ງເຮັດໃຫ້ກຸ່ມນິຍົມກະສັດມົດງຽບລົງ, ຈົນວ່າພວກເຂົາບໍ່ກ້າ ຄັດຄ້ານນອກຈາກຈຳຕ້ອງດຳລົງຮັກສາອຸດົມການແຫ່ງ ອິດສະລະພາບໄວ້.

Alma 51

And now it came to pass in the commencement of the twenty and fifth year of the reign of the judges over the people of Nephi, they having established peace between the people of Lehi and the people of Morianton concerning their lands, and having commenced the twenty and fifth year in peace;

Nevertheless, they did not long maintain an entire peace in the land, for there began to be a contention among the people concerning the chief judge Pahoran; for behold, there were a part of the people who desired that a few particular points of the law should be altered.

But behold, Pahoran would not alter nor suffer the law to be altered; therefore, he did not hearken to those who had sent in their voices with their petitions concerning the altering of the law.

Therefore, those who were desirous that the law should be altered were angry with him, and desired that he should no longer be chief judge over the land; therefore there arose a warm dispute concerning the matter, but not unto bloodshed.

And it came to pass that those who were desirous that Pahoran should be dethroned from the judgment-seat were called king-men, for they were desirous that the law should be altered in a manner to overthrow the free government and to establish a king over the land.

And those who were desirous that Pahoran should remain chief judge over the land took upon them the name of freemen; and thus was the division among them, for the freemen had sworn or covenanted to maintain their rights and the privileges of their religion by a free government.

And it came to pass that this matter of their contention was settled by the voice of the people. And it came to pass that the voice of the people came in favor of the freemen, and Pahoran retained the judgment-seat, which caused much rejoicing among the brethren of Pahoran and also many of the people of liberty, who also put the king-men to silence, that they durst not oppose but were obliged to maintain the cause of freedom.

Ხ ບັດນີ້ກຸ່ມນິຍົມກະສັດເປັນພວກທີ່ຢູ່ໃນ ຕະກຸນສູງ, ແລະ ພວກເຂົາພະຍາຍາມທີ່ຈະຂຶ້ນເປັນກະສັດ; ແລະ ພວກເຂົາໄດ້ຮັບການສະໜັບສະໜູນໂດຍຜູ້ທີ່ສະແຫວງຫາອຳນາດ ແລະ ສິດອຳນາດເພື່ອປົກຄອງຜູ້ຄົນ.

Ჯ ແຕ່ຈົ່ງເບິ່ງ, ຄວນນີ້ເປັນເວລາທີ່ອັນຕະລາຍຫລາຍທີ່ຈະມີການຂັດແຍ້ງກັນໃນບັນດາຜູ້ຄົນຂອງນີໄຟ; ເພາະຈົ່ງເບິ່ງ, ອະມາລີໄຄຢາໄດ້ປຸກລະດົມໃຈຂອງຊາວເລມັນໃຫ້ຕໍ່ຕ້ານຜູ້ຄົນຊາວນີໄຟອີກ, ແລະ ລາວໄດ້ເຕົ້າໂຮມເອົາທະຫານຈາກທຸກແຫ່ງຫົນໃນແຜ່ນດິນ, ເພື່ອໃຫ້ພວກເຂົາຈັບອາວຸດ, ແລະ ຕຽມເຮັດສົງຄາມດ້ວຍສຸດຄວາມພາກພຽນ; ເພາະວ່າລາວໄດ້ສາບານໄວ້ວ່າ ລາວຈະກິນເລືອດຂອງໂມໂຣໄນໃຫ້ໄດ້.

ᲰᲐ ແຕ່ຈົ່ງເບິ່ງ, ພວກເຮົາຈະເຫັນວ່າ ຄຳສັນຍາທີ່ລາວເຮັດໄວ້ນັ້ນບໍ່ຮອບຄອບ; ເຖິງຢ່າງໃດກໍຕາມ, ລາວຍັງໄດ້ຕຽມຕົວ ແລະ ຕຽມກອງທັບຂອງລາວເພື່ອຈະມາຕໍ່ສູ້ກັບຊາວນີໄຟ.

ᲰᲑ ບັດນີ້ກອງທະຫານຂອງລາວບໍ່ມີກຳລັງຫລາຍດັ່ງທີ່ເຄີຍມີມາກ່ອນ, ຍ້ອນວ່າຫລາຍພັນຖືກຂ້າຕາຍໄປດ້ວຍມືຂອງຊາວນີໄຟ; ເຖິງແມ່ນວ່າພວກເຂົາມີການສູນເສຍຢ່າງໜັກກໍຕາມ, ອະມາລີໄຄຢາຍັງໄດ້ເຕົ້າໂຮມກອງທັບອັນໃຫຍ່ໄດ້ຢ່າງແປກປະຫລາດໃຈ, ເຖິງຂະໜາດທີ່ລາວບໍ່ມີຄວາມຢ້ານກົວເລີຍທີ່ຈະລົງມາຫາແຜ່ນດິນເຊຣາເຮັມລາ.

ᲰᲒ ແທ້ຈິງແລ້ວ, ຕົວອະມາລີໄຄຢາເອງທີ່ເປັນຫົວໜ້າກອງທັບຊາວເລມັນ. ແລະ ມັນເປັນປີທີຊາວຫ້າແຫ່ງການປົກຄອງຂອງຜູ້ຕັດສິນ; ແລະ ເປັນເວລາດຽວກັນກັບຕອນທີ່ຊາວນີໄຟເລີ່ມຕົກລົງກັນໄດ້ໃນເລື່ອງການງານຂອງການຂັດແຍ້ງກ່ຽວກັບເພໂຮຣັນຫົວໜ້າຜູ້ຕັດສິນນັ້ນ.

ᲰᲓ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພວກທີ່ມີຊື່ວ່າກຸ່ມນິຍົມກະສັດໄດ້ຍິນວ່າຊາວເລມັນກຳລັງຍົກທັບລົງມາສູ້ຮົບກັບຕົນ, ພວກເຂົາຈົ່ງມີຄວາມຊື່ນຊົມຢູ່ໃນໃຈ; ແລະ ພວກເຂົາບໍ່ຍອມຈັບອາວຸດ, ເພາະວ່າພວກເຂົາຄຽດແຄ້ນໃຫ້ຫົວໜ້າຜູ້ຕັດສິນ ແລະ ຜູ້ຄົນແຫ່ງເສລີພາບ, ຈົນວ່າພວກເຂົາບໍ່ຍອມຈັບອາວຸດເພື່ອປ້ອງກັນປະເທດຊາດຂອງຕົນ.

ᲰᲔ ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາໂມໂຣໄນເຫັນສິ່ງນີ້, ແລະ ເຫັນອີກว่าชาวเลมันกำลังมารอดชายแดนของแผ่นดิน, ເພີ່ນກໍໃຈຮ້າຍຢ່າງໃຫຍ່, ຍ້ອນວ່າຄວາມດື້ດ້ານຂອງພວກເຂົາ ຜູ້ຊຶ່ງເພີ່ນໄດ້ອອກແຮງຢ່າງພາກພຽນທີ່ສຸດເພື່ອປ້ອງກັນພວກເຂົາໄວ້; ແທ້ຈິງແລ້ວ, ເພີ່ນຄຽດແຄ້ນຫລາຍທີ່ສຸດ ຈົນວ່າຈິດວິນຍານຂອງເພີ່ນເຕັມໄປດ້ວຍຄວາມຄຽດແຄ້ນຕໍ່ພວກເຂົາ.

Now those who were in favor of kings were those of high birth, and they sought to be kings; and they were supported by those who sought power and authority over the people.

But behold, this was a critical time for such contentions to be among the people of Nephi; for behold, Amalickiah had again stirred up the hearts of the people of the Lamanites against the people of the Nephites, and he was gathering together soldiers from all parts of his land, and arming them, and preparing for war with all diligence; for he had sworn to drink the blood of Moroni.

But behold, we shall see that his promise which he made was rash; nevertheless, he did prepare himself and his armies to come to battle against the Nephites.

Now his armies were not so great as they had hitherto been, because of the many thousands who had been slain by the hand of the Nephites; but notwithstanding their great loss, Amalickiah had gathered together a wonderfully great army, insomuch that he feared not to come down to the land of Zarahemla.

Yea, even Amalickiah did himself come down, at the head of the Lamanites. And it was in the twenty and fifth year of the reign of the judges; and it was at the same time that they had begun to settle the affairs of their contentions concerning the chief judge, Pahoran.

And it came to pass that when the men who were called king-men had heard that the Lamanites were coming down to battle against them, they were glad in their hearts; and they refused to take up arms, for they were so wroth with the chief judge, and also with the people of liberty, that they would not take up arms to defend their country.

And it came to pass that when Moroni saw this, and also saw that the Lamanites were coming into the borders of the land, he was exceedingly wroth because of the stubbornness of those people whom he had labored with so much diligence to preserve; yea, he was exceedingly wroth; his soul was filled with anger against them.

ຄ.ສ. ૧૯૮૧

૧૫ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນໄດ້ສົ່ງໃບຄຳຮ້ອງຕາມ ສຽງຂອງຜູ້ຄົນໄປຫາຜູ້ປົກຄອງແຜ່ນດິນ, ໂດຍປາດຖະໜາ ໃຫ້ເພິ່ນອ່ານມັນ ແລະ ມອບອຳນາດໃຫ້ແກ່ເພິ່ນ (�โมโรไน) ເພື່ອຈະໄດ້ບັງຄັບຜູ້ທີ່ແຍກອອກໄປເຫລົ່ານັ້ນໃຫ້ປ້ອງກັນ ປະເທດຊາດຂອງຕົນ ຖ້າບໍ່ດັ່ງນັ້ນກໍຂໍອະນຸຍາດໃຫ້ຂ້າພວກເຂົາ ຖິ້ມເສຍ.

૧૬ ເພາະມັນເປັນຄວາມເອົາໃຈໃສ່ປະການທຳອິດຂອງເພິ່ນທີ່ຈະ ໃຫ້ການຂັດແຍ້ງ ແລະ ການແຕກແຍກກັນຢຸດຕິລົງ; ເພາະຈົ່ງ ເບິ່ງ, ເລື່ອງແບບນີ້ໄດ້ນຳເອົາຄວາມພິນາດທັງໝົດມາຫາພວກ ເຂົາມາກ່ອນແລ້ວ. ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນໄດ້ຮັບ ອະນຸຍາດຕາມສຽງຂອງຜູ້ຄົນ.

૧૭ ແລະ ເຫດການໄດ້ບັງເກີດຂຶ້ນຄື �โมโรไนได้ສັ່ງໃຫ້ກອງທັບ ຂອງເພິ່ນຍົກໄປຕໍ່ສູ້ກັບກຸ່ມນິຍົມກະສັດເພື່ອດຶງເອົາຄວາມ ທະນົງຕົວ, ແລະ ຄວາມມັກໃຫຍ່ໄຝ່ສູງຂອງພວກເຂົາລົງມາ, ແລະ ໃຫ້ພວກເຂົາມາຢູ່ລະດັບດຽວກັບໂລກ, ຫລື ໃຫ້ພວກເຂົາ ຈັບອາວຸດເພື່ອສະໜັບສະໜູນອຸດົມການແຫ່ງເສລີພາບ.

૧૮ ແລະ ເຫດການໄດ້ບັງເກີດຂຶ້ນຄື ກອງທະຫານໄດ້ອອກ ເດີນທາງໄປສູ້ຮົບກັບກຸ່ມນິຍົມກະສັດ; ແລະ ພວກເຂົາໄດ້ດຶງ ເອົາຄວາມທະນົງຕົວ ແລະ ຄວາມມັກໃຫຍ່ໄຝ່ສູງຂອງພວກເຂົາ ລົງມາ, ເຖິງຂະໜາດທີ່ໃນຂະນະທີ່ພວກເຂົາຍົກອາວຸດແຫ່ງ ສົງຄາມຂຶ້ນຕໍ່ສູ້ກັບຄົນຂອງ�โมโรไน ພວກເຂົາຖືກໂຄ່ນລົງ ແລະ ຖືກໃຫ້ຢູ່ໃນລະດັບດຽວກັບໂລກ.

૧૯ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ທີ່ແຍກອອກໄປຈຳນວນສີ່ ພັນຄົນຖືກໂຄ່ນລົງດ້ວຍດາບ; ແລະ ພວກຜູ້ນຳຂອງພວກເຂົາ ທີ່ບໍ່ຖືກຂ້າໃນການສູ້ຮົບນັ້ນກໍໄດ້ຖືກຈັບເຂົ້າຄຸກ, ເພາະວ່າມັນ ບໍ່ມີເວລາທີ່ຈະພິຈາລະນາຄະດີໃນເວລານັ້ນ.

૮૦ ແລະ ພວກທີ່ແຍກອອກໄປທີ່ເຫລືອຢູ່ນັ້ນ ຢ້ານວ່າຕົວເອງຈະ ຖືກຂ້າຖິ້ມ, ຈົ່ງຍອມຕໍ່ຄັນປ້າຍແຫ່ງເສລີພາບ, ແລະ ຖືກ ບັງຄັບໃຫ້ປັກ ປ້າຍແຫ່ງເສລີພາບໄວ້ເທິງຫໍສູງ ແລະ ຢູ່ໃນ ເມືອງຂອງພວກເຂົາ, ແລະ ໃຫ້ຈັບອາວຸດປ້ອງກັນປະເທດຊາດ ຂອງຕົນ.

૮૧ ແລະ �โมโรไนได้ເຮັດໃຫ້ກຸ່ມນິຍົມກະສັດສິ້ນສຸດລົງດັ່ງນີ້, ຈົນວ່າບໍ່ມີຜູ້ໃດຮູ້ຈັກກັນອີກເລີຍໃນຊື່ວ່າກຸ່ມນິຍົມກະສັດ; ແລະ ເພິ່ນໄດ້ເຮັດໃຫ້ຄວາມດື້ດ້ານ ແລະ ຄວາມທະນົງຕົວຂອງພວກ ທີ່ອ້າງວ່າຕົນມາຈາກສາຍເລືອດຂອງຊຸນນາງຜູ້ໃຫຍ່ໄດ້ສິ້ນສຸດ ລົງດັ່ງນີ້; ແລ້ວພວກເຂົາຖືກນຳລົງມາໃຫ້ຖ່ອມຕົວຄືກັນກັບ ພີ່ນ້ອງຂອງພວກເຂົາ, ແລະ ຍິນດີທີ່ຈະຕໍ່ສູ້ຢ່າງກ້າຫານເພື່ອ ອິດສະລະພາບ ຂອງພວກເຂົາຈາກຄວາມເປັນທາດ.

And it came to pass that he sent a petition, with the voice of the people, unto the governor of the land, desiring that he should read it, and give him (Moroni) power to compel those dissenters to defend their country or to put them to death.

For it was his first care to put an end to such contentions and dissensions among the people; for behold, this had been hitherto a cause of all their destruction. And it came to pass that it was granted according to the voice of the people.

And it came to pass that Moroni commanded that his army should go against those king-men, to pull down their pride and their nobility and level them with the earth, or they should take up arms and support the cause of liberty.

And it came to pass that the armies did march forth against them; and they did pull down their pride and their nobility, insomuch that as they did lift their weapons of war to fight against the men of Moroni they were hewn down and leveled to the earth.

And it came to pass that there were four thousand of those dissenters who were hewn down by the sword; and those of their leaders who were not slain in battle were taken and cast into prison, for there was no time for their trials at this period.

And the remainder of those dissenters, rather than be smitten down to the earth by the sword, yielded to the standard of liberty, and were compelled to hoist the title of liberty upon their towers, and in their cities, and to take up arms in defence of their country.

And thus Moroni put an end to those king-men, that there were not any known by the appellation of king-men; and thus he put an end to the stubbornness and the pride of those people who professed the blood of nobility; but they were brought down to humble themselves like unto their brethren, and to fight valiantly for their freedom from bondage.

Behold, it came to pass that while Moroni was thus breaking down the wars and contentions among his own people, and subjecting them to peace and civilization, and making regulations to prepare for war against the Lamanites, behold, the Lamanites had come into the land of Moroni, which was in the borders by the seashore.

And it came to pass that the Nephites were not sufficiently strong in the city of Moroni; therefore Amalickiah did drive them, slaying many. And it came to pass that Amalickiah took possession of the city, yea, possession of all their fortifications.

And those who fled out of the city of Moroni came to the city of Nephihah; and also the people of the city of Lehi gathered themselves together, and made preparations and were ready to receive the Lamanites to battle.

But it came to pass that Amalickiah would not suffer the Lamanites to go against the city of Nephihah to battle, but kept them down by the seashore, leaving men in every city to maintain and defend it.

And thus he went on, taking possession of many cities, the city of Nephihah, and the city of Lehi, and the city of Morianton, and the city of Omner, and the city of Gid, and the city of Mulek, all of which were on the east borders by the seashore.

And thus had the Lamanites obtained, by the cunning of Amalickiah, so many cities, by their numberless hosts, all of which were strongly fortified after the manner of the fortifications of Moroni; all of which afforded strongholds for the Lamanites.

And it came to pass that they marched to the borders of the land Bountiful, driving the Nephites before them and slaying many.

But it came to pass that they were met by Teancum, who had slain Morianton and had headed his people in his flight.

ຄ. ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນຄື ຂະນະທີ່ ໂມໂຣໄນກຳລັງ ເຮັດໃຫ້ເສີກເສືອ ແລະ ການຂັດແຍ້ງໃນບັນດາຜູ້ຄົນສິ້ນສຸດລົງ ແລະ ໃຫ້ພວກເຂົາຫັນມາຫາສັນຕິພາບ ແລະ ມາຫາຄວາມ ສີວິໄລ, ແລະ ຕັ້ງຂໍ້ບັງຄັບເພື່ອຕຽມສົງຄາມຕໍ່ສູ້ກັບຊາວເລມັນ ນັ້ນ, ຈົ່ງເບິ່ງ, ຊາວເລມັນໄດ້ເຂົ້າມາໃນແຜ່ນດິນໂມໂຣໄນກ່ອນ ແລ້ວ, ຊຶ່ງຢູ່ໃນຊາຍແດນໃກ້ຝັ່ງທະເລ.

ຄ. ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວນີໄຟທີ່ຢູ່ໃນເມືອງໂມໂຣ ໄນບໍ່ມີກຳລັງແຂງແຮງພຽງພໍ; ສະນັ້ນ ອະມາລີໄຄຢາຈຶ່ງໄດ້ ຂັບໄລ່ ແລະ ຂ້າຜູ້ຄົນເປັນຈຳນວນຫລວງຫລາຍ. ແລະ ເຫດການໄດ້ບັງເກີດຂຶ້ນຄື ອະມາລີໄຄຢາໄດ້ຍຶດເອົາເມືອງນັ້ນ, ແທ້ຈິງແລ້ວ, ເມືອງນີ້ເປັນສູນກາງໃຫຍ່ຂອງຄ້າຍຍາມທັງໝົດ ຂອງຊາວນີໄຟ.

ຄ. ແລະ ຜູ້ຄົນຂອງເມືອງໂມໂຣໄນກໍໄດ້ໜີມາຫາເມືອງນີໄຟຮາ; ແລະ ຜູ້ຄົນຂອງເມືອງລີໄຮໄດ້ມາເຕົ້າໂຮມກັນເພື່ອຕຽມຕໍ່ສູ້ ແລະ ພ້ອມທີ່ຈະຮັບມືກັບຊາວເລມັນຄືກັນ.

ຄ. ແຕ່ເຫດການໄດ້ບັງເກີດຂຶ້ນຄື ອະມາລີໄຄຢາບໍ່ຍອມໃຫ້ຊາວ ເລມັນຍົກທັບໄປສູ້ຮົບກັບເມືອງນີໄຟຮາ, ແຕ່ໃຫ້ຕັ້ງທັບຢູ່ໃກ້ ຝັ່ງທະເລ, ໂດຍຈັດໃຫ້ມີທະຫານຍາມເພື່ອປ້ອງກັນ ແລະ ຮັກສາເມືອງນັ້ນໄວ້.

ຄ. ແລະ ລາວໄດ້ຍຶດເອົາຫລາຍຫົວເມືອງເຊັ່ນ ເມືອງນີໄຟຮາ, ເມືອງລີໄຮ, ແລະ ເມືອງໂມຣິອານທັນ, ແລະ ເມືອງອອມເນີ, ແລະ ເມືອງກິດ, ແລະ ເມືອງມິວເລັກ, ຊຶ່ງທັງໝົດນີ້ຕັ້ງຢູ່ຕາມ ຊາຍແດນໃກ້ຝັ່ງທະເລທາງຕາເວັນອອກ.

ຄ. ຊາວເລມັນໄດ້ຍຶດເອົາຫລາຍຫົວເມືອງມາໄດ້ດັ່ງນີ້, ຕາມເລ່ ຫລ່ຽມຂອງອະມາລີໄຄຢາ, ແລະ ດ້ວຍກຳລັງທະຫານອັນນັບບໍ່ ຖ້ວນຂອງລາວ ຊຶ່ງຫົວເມືອງເຫລົ່ານີ້ໄດ້ຮັບ ການເສີມສ້າງໃຫ້ ແໜ້ນໜາຂຶ້ນດ້ວຍຄວາມສາມາດຂອງໂມໂຣໄນ; ແລະ ມັນຈຶ່ງ ເຮັດໃຫ້ຊາວເລມັນມີທີ່ໝັ້ນຂອງຕົນ.

ຄ. ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ເດີນທາງໄປຫາ ຊາຍແດນຂອງແຜ່ນດິນອຸດົມສົມບູນ ແລະ ໄດ້ຕ້ອນເອົາຊາວນີ ໄຟໄປທາງໜ້າພວກເຂົາ ແລະ ໄດ້ຂ້າຫລາຍຄົນ.

ຄ. ແຕ່ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ພົບກັບທີອານ ຄຳ, ຜູ້ທີ່ ຂ້າໂມຣິອານທັນນັ້ນ ຜູ້ທີ່ສະກັດຜູ້ຄົນຂອງລາວຕອນ ທີ່ພວກເຂົາແຕກໜີໄປ.

ມ໖ ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວໄດ້ສະກັດອະມາລີໄຄຢາ ໄວ້, ຂະນະທີ່ລາວກຳລັງເດີນທັບມາພ້ອມດ້ວຍກຳລັງທະຫານ ອັນຫລວງຫລາຍຂອງລາວ ເພື່ອຈະໄດ້ເຂົ້າຍຶດເອົາແຜ່ນດິນ ອຸດົມສົມບູນ, ແລະ ແຜ່ນດິນທາງເໜືອເປັນຫົວເມືອງຂຶ້ນນຳ ອີກ.

And it came to pass that he headed Amalickiah also, as he was marching forth with his numerous army that he might take possession of the land Bountiful, and also the land northward.

ມ໗ ແຕ່ຈົ່ງເບິ່ງ ອະມາລີໄຄຢາຕ້ອງຜິດຫວັງໂດຍຖືກທີອານຄຳ ພ້ອມດ້ວຍທະຫານຂອງລາວຕີໂຕ້ຕອບ, ເພາະວ່າພວກເຂົາ ເຫລົ່ານັ້ນເປັນນັກຮົບທີ່ຍິ່ງໃຫຍ່; ເພາະວ່າທະຫານຂອງທີອານ ຄຳທຸກຄົນແຂງແຮງກວ່າຊາວເລມັນໃນດ້ານກຳລັງ ແລະ ມີ ຄວາມຊຳນານໃນດ້ານການສູ້ຮົບ, ເຖິງຂະໜາດທີ່ພວກເຂົາໄດ້ ຊະນະຊາວເລມັນ.

But behold he met with a disappointment by being repulsed by Teancum and his men, for they were great warriors; for every man of Teancum did exceed the Lamanites in their strength and in their skill of war, insomuch that they did gain advantage over the Lamanites.

ມ໘ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຮາວີພວກນັ້ນ, ເຖິງຂະໜາດທີ່ພວກເຂົາໄດ້ຂ້າຟັນພວກນັ້ນຈົນຄ່ຳ. ແລະ ເຫດການໄດ້ບັງເກີດຂຶ້ນຄື ທີອານຄຳ ແລະ ທະຫານຂອງລາວ ໄດ້ຕັ້ງຜ້າເຕັນພັກຢູ່ໃນຊາຍແດນຂອງແຜ່ນດິນອຸດົມສົມບູນ; ແລະ ອະມາລີໄຄຢາໄດ້ຕັ້ງຜ້າເຕັນຂອງລາວຂຶ້ນທີ່ຊາຍແດນໃນ ຫາດຊາຍແຄມຝັ່ງທະເລ, ແລະ ພວກນັ້ນຖືກຕ້ອນມາດັ່ງນີ້.

And it came to pass that they did harass them, insomuch that they did slay them even until it was dark. And it came to pass that Teancum and his men did pitch their tents in the borders of the land Bountiful; and Amalickiah did pitch his tents in the borders on the beach by the seashore, and after this manner were they driven.

ມ໙ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນຕອນກາງຄືນ, ທີອານຄຳ ແລະ ຂ້າໃຊ້ຂອງລາວໄດ້ລັກອອກໄປທາງນອກ ແລະ ເຂົ້າໄປໃນ ຄ້າຍຂອງອະມາລີໄຄຢາ; ແລະ ຈົ່ງເບິ່ງ, ພວກເຂົານອນຫລັບ ສະໜິດຍ້ອນວ່າ ຄວາມອ່ອນເພຍທີ່ໄດ້ຕໍ່ສູ້ກັນໝົດມື້ ແລະ ຄວາມຮ້ອນໃນຕອນກາງເວັນ.

And it came to pass that when the night had come, Teancum and his servant stole forth and went out by night, and went into the camp of Amalickiah; and behold, sleep had overpowered them because of their much fatigue, which was caused by the labors and heat of the day.

ມ໑໐ ແລະ ເຫດການໄດ້ບັງເກີດຂຶ້ນຄື ທີອານຄຳໄດ້ລັກເຂົ້າໄປໃນ ຜ້າເຕັນຂອງກະສັດຢ່າງລັບໆ, ແລະ ຊັດຫອກເຂົ້າໃສ່ກາງ ຫົວໃຈຂອງກະສັດ; ແລະ ລາວໄດ້ເຮັດໃຫ້ກະສັດຕາຍຄາທີ່ໂດຍ ບໍ່ໄດ້ເຮັດໃຫ້ຂ້າໃຊ້ຂອງກະສັດຮູ້ເມື່ອຄືງເລີຍ.

And it came to pass that Teancum stole privily into the tent of the king, and put a javelin to his heart; and he did cause the death of the king immediately that he did not awake his servants.

ມ໑໑ ແລະ ລາວໄດ້ກັບຄືນໄປຫາຄ້າຍຂອງລາວຢ່າງລັບໆ, ແລະ ຈົ່ງເບິ່ງ, ທະຫານຂອງລາວກຳລັງນອນຫລັບຢູ່, ແລະ ລາວໄດ້ ປຸກພວກເຂົາໃຫ້ຕື່ນຂຶ້ນ ແລະ ໄດ້ເລົ່າເຫດການໃຫ້ພວກເຂົາ ຟັງເຖິງເລື່ອງທັງໝົດທີ່ລາວໄດ້ເຮັດໄປນັ້ນ.

And he returned again privily to his own camp, and behold, his men were asleep, and he awoke them and told them all the things that he had done.

ມ໑໒ ແລະ ລາວໄດ້ໃຫ້ກອງທັບທະຫານຂອງລາວຕຽມພ້ອມໄວ້, ຍ້ອນວ່າຊາວເລມັນຈະຕື່ນຂຶ້ນ ແລະ ຈະຍົກທັບມາໂຈມຕີພວກ ເຂົາ.

And he caused that his armies should stand in readiness, lest the Lamanites had awakened and should come upon them.

ມ໑໓ ແລະ ປີທີຊາວຫ້າແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ ຄົນຂອງນີໄຟໄດ້ສິ້ນສຸດລົງດັ່ງນີ້; ແລະ ວັນເວລາຂອງອະມາລີ ໄຄຢາເອງກໍໄດ້ສິ້ນສຸດລົງໄປເຊັ່ນດຽວກັນ.

And thus endeth the twenty and fifth year of the reign of the judges over the people of Nephi; and thus endeth the days of Amalickiah.

ແອວມາ ๕๘

๑ ແລະ ບັດນີ້, ເຫດການໄດ້ບັງເກີດຂຶ້ນໃນປີທີຊາວຫົກແຫ່ງການ ປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ, ຈົ່ງເບິ່ງ, ເວລາ ຊາວເລມັນຕື່ນຂຶ້ນມາໃນຕອນເຊົ້າ, ຊຶ່ງເປັນມື້ທຳອິດຂອງເດືອນ ໜຶ່ງ, ຈົ່ງເບິ່ງ, ພວກເຂົາໄດ້ເຫັນອະມາລີໄຄຢາຕາຍຢູ່ໃນຜ້າເຕັນ ຂອງລາວ; ແລະ ພວກເຂົາກໍໄດ້ເຫັນອີກว່າ ທີອານຄຳຕຽມ ພ້ອມແລ້ວທີ່ຈະສູ້ຮົບກັບພວກເຂົາໃນມື້ນັ້ນ.

๒ ແລະ ບັດນີ້, ເວລາຊາວເລມັນເຫັນດັ່ງນີ້ແລ້ວ ພວກເຂົາກໍ ຕົກໃຈ ແລະ ມີຄວາມຢ້ານກົວຫລາຍ; ແລະ ພວກເຂົາຈຶ່ງໄດ້ ລົ້ມເລີກແຜນການຂອງພວກເຂົາທີ່ຈະເດີນທັບໄປຫາແຜ່ນດິນ ທາງເໜືອ, ແລະ ພວກເຂົາໄດ້ຖອຍກອງທັບທັງໝົດເຂົ້າໄປໃນ ເມືອງມິວເລັກ, ແລະ ເຂົ້າໄປຫາທີ່ກຳບັງໃນຄ້າຍຂອງພວກເຂົາ.

๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງຊາຍຂອງອະມາລີໄຄຢາ ໄດ້ຖືກແຕ່ງຕັ້ງໃຫ້ເປັນກະສັດປົກຄອງຜູ້ຄົນ; ແລະ ລາວມີຊື່ວ່າ ອາມໂມຣອນ; ກະສັດອາມໂມຣອນນ້ອງຊາຍຂອງກະສັດອະ ມາລີໄຄຢາຈຶ່ງໄດ້ຖືກແຕ່ງຕັ້ງໃຫ້ປົກຄອງແທນດັ່ງນີ້.

๔ ແລະ ເຫດການໄດ້ບັງເກີດຂຶ້ນຄື ອາມໂມຣອນໄດ້ສັ່ງໃຫ້ຜູ້ຄົນ ປົກຄອງຫົວເມືອງເຫລົ່ານັ້ນໄວ້, ເພາະພວກເຂົາໄດ້ເມືອງເຫລົ່າ ນັ້ນມາດ້ວຍການເສຍເລືອດເນື້ອ; ເພາະກ່ອນທີ່ພວກເຂົາຈະໄດ້ ເມືອງໃດມາ ພວກເຂົາຕ້ອງໄດ້ນອງເລືອດຢ່າງຫລວງຫລາຍ.

๕ ແລະ ບັດນີ້, ທີອານຄຳເຫັນວ່າຊາວເລມັນຕັ້ງໃຈທີ່ຈະຮັກສາ ເມືອງເຫລົ່ານັ້ນ ແລະ ພາກສ່ວນຕ່າງໆຂອງແຜ່ນດິນທີ່ພວກ ເຂົາໄດ້ມາ, ແລະ ໂດຍທີ່ໄດ້ເຫັນຄວາມຫລວງຫລາຍຂອງ ຈຳນວນຜູ້ຄົນ, ທີອານຄຳຈຶ່ງຄິດວ່າມັນບໍ່ສົມຄວນທີ່ລາວຈະເຂົ້າ ໂຈມຕີພວກເຂົາໃນຄ້າຍເຫລົ່ານັ້ນ.

๖ ແຕ່ລາວໄດ້ຈັດວາງກຳລັງທະຫານຂອງລາວໄວ້ໂດຍຮອບ, ຄື ກັນກັບວ່າກຳລັງຕຽມເຮັດເສີກ; ແທ້ຈິງແລ້ວ, ລາວກຳລັງຕຽມ ປ້ອງກັນຕົວໃຫ້ພົ້ນຈາກພວກນັ້ນ, ໂດຍ ສ້າງກຳແພງຂຶ້ນໂດຍ ຮອບ ແລະ ຕຽມບ່ອນຕັ້ງກຳລັງໄວ້.

๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວໄດ້ຕຽມສົງຄາມຢູ່ ສະເໝີ ຈົນກວ່າໂມໂຣໄນສົ່ງທະຫານຈຳນວນຫລວງຫລາຍໄປ ເພີ່ມກຳລັງຂອງລາວ.

๘ ແລະ ໂມໂຣໄນໄດ້ອອກຄຳສັ່ງມາຫາລາວອີກว່າ ລາວຄວນ ກັກຂັງຊະເລີຍເສີກທັງໝົດທີ່ຕົກຢູ່ໃນກຳມືຂອງລາວໄວ້; ເພາະວ່າຊາວເລມັນໄດ້ຈັບເອົາຊະເລີຍເສີກເປັນຈຳນວນ ຫລວງຫລາຍໄປ, ຄືລາວຕ້ອງກັກຂັງຊະເລີຍເສີກຂອງຊາວເລ ມັນທັງໝົດໄວ້ເພື່ອເປັນການໄຖ່ເອົາພວກທີ່ຊາວເລມັນໄດ້ຈັບ ໄປນັ້ນ.

Alma 52

And now, it came to pass in the twenty and sixth year of the reign of the judges over the people of Nephi, behold, when the Lamanites awoke on the first morning of the first month, behold, they found Amalickiah was dead in his own tent; and they also saw that Teancum was ready to give them battle on that day.

And now, when the Lamanites saw this they were affrighted; and they abandoned their design in marching into the land northward, and retreated with all their army into the city of Mulek, and sought protection in their fortifications.

And it came to pass that the brother of Amalickiah was appointed king over the people; and his name was Ammoron; thus king Ammoron, the brother of king Amalickiah, was appointed to reign in his stead.

And it came to pass that he did command that his people should maintain those cities, which they had taken by the shedding of blood; for they had not taken any cities save they had lost much blood.

And now, Teancum saw that the Lamanites were determined to maintain those cities which they had taken, and those parts of the land which they had obtained possession of; and also seeing the enormity of their number, Teancum thought it was not expedient that he should attempt to attack them in their forts.

But he kept his men round about, as if making preparations for war; yea, and truly he was preparing to defend himself against them, by casting up walls round about and preparing places of resort.

And it came to pass that he kept thus preparing for war until Moroni had sent a large number of men to strengthen his army.

And Moroni also sent orders unto him that he should retain all the prisoners who fell into his hands; for as the Lamanites had taken many prisoners, that he should retain all the prisoners of the Lamanites as a ransom for those whom the Lamanites had taken.

ຈ ແລະ ເພີ່ນໄດ້ສັ່ງມາອີກว່າ ລາວຄວນຕັ້ງດ່ານຄ້າຍໄວ້ໃນ ແຜ່ນດິນອຸດົມສົມບູນ, ແລະ ຍຶດເສັ້ນທາງ ແຄບຊຶ່ງເຊື່ອມຕໍ່ຊຶ່ງ ນຳໄປສູ່ແຜ່ນດິນທາງເໜືອໄວ້, ຖ້າບໍ່ດັ່ງນັ້ນ ຊາວເລມັນຈະ ຍຶດເອົາຈຸດນັ້ນ ແລະ ຈະມີອຳນາດລົບກວນພວກເຂົາທຸກໆດ້ານ.

ຈ ແລະ ໂມໂຣໄນສັ່ງມາຫາລາວອີກ, ໂດຍປາດຖະໜາຢາກໃຫ້ ລາວໝັ້ນຄົງຢູ່ໃນການປົກປັກຮັກສາແຜ່ນດິນສ່ວນນີ້ ແລະໃຫ້ ພະຍາຍາມຫາໂອກາດໂດຍທຸກວິທີທາງທີ່ຈະສ້າງຄວາມ ເສຍຫາຍໃຫ້ແກ່ຊາວເລມັນໃນແຜ່ນດິນສ່ວນນີ້ໃຫ້ຫລາຍທີ່ສຸດ ເທົ່າທີ່ຈະມີກຳລັງເຮັດໄດ້ ເພື່ອວ່າລາວຈະໄດ້ຍຶດເມືອງຕ່າງໆຄືນ ມາ ເຖິງແມ່ນວ່າມັນຈະໄດ້ມາໂດຍກົນອຸບາຍເລ່ຫລ່ຽມ ຫລື ໂດຍວິທີໃດກໍຕາມ; ແລະ ໃຫ້ລາວຕັ້ງຄ້າຍ ແລະ ເສີມກຳລັງຂຶ້ນ ຕາມຫົວເມືອງຕ່າງໆທີ່ຍັງບໍ່ໄດ້ຕົກຢູ່ໃນກຳມືຂອງຊາວເລມັນ ເທື່ອ.

ຈ ແລະ ເພີ່ນໄດ້ບອກລາວว່າ, ຂ້າພະເຈົ້າຢາກມາຫາທ່ານ, ແຕ່ ຈົ່ງເບິ່ງ, ຊາວເລມັນໄດ້ເຂົ້າມາໂຈມຕີພວກເຮົາຢູ່ທາງຊາຍແດນ ຂອງແຜ່ນດິນໃກ້ທະເລທາງຕາເວັນຕົກ; ແລະ ຈົ່ງເບິ່ງ, ຂ້າພະເຈົ້າຕ້ອງໄປຕໍ່ຕ້ານພວກເຂົາ, ສະນັ້ນ ຂ້າພະເຈົ້າຈຶ່ງ ມາຫາທ່ານບໍ່ໄດ້.

ຈ ບັດນີ້, ກະສັດ (ອາມໂມຣອນ) ໄດ້ອອກຈາກແຜ່ນດິນເຊຣາ ເຮັມລາໄປ, ແລະ ໄດ້ເຮັດໃຫ້ເປັນທີ່ຮູ້ແກ່ລາຊິນີກ່ຽວກັບການ ຕາຍຂອງອ້າຍຂອງລາວ, ແລະ ລາວໄດ້ເຕົ້າໂຮມຄົນເປັນຈຳນວນ ຫລວງຫລາຍ, ແລະ ໄດ້ເດີນທັບອອກໄປສູ້ຮົບກັບຊາວນີໄຟທີ່ ຊາຍແດນໃກ້ທະເລທາງຕາເວັນຕົກ.

ຈ ແລະ ລາວພະຍາຍາມລົບກວນຊາວນີໄຟຢູ່ດັ່ງນັ້ນ, ແລະ ເພື່ອຈະຖອນກຳລັງສ່ວນໜຶ່ງຂອງພວກເຂົາໄປຍັງແຜ່ນດິນ ສ່ວນນັ້ນ ໃນຂະນະທີ່ລາວສັ່ງຄົນທີ່ລາວປະໄວ້ໃຫ້ດູແລເມືອງທີ່ ໄດ້ມາ, ໃຫ້ພວກເຂົາລົບກວນຊາວນີໄຟຕາມຊາຍແດນໃກ້ທະເລ ທາງຕາເວັນອອກນຳອີກ, ແລະ ໃຫ້ເຂົ້າຍຶດເອົາແຜ່ນດິນຂອງ ພວກເຂົາໃຫ້ໄດ້ຫລາຍທີ່ສຸດເທົ່າທີ່ພວກເຂົາຈະເຮັດໄດ້, ຕາມ ກຳລັງຂອງກອງທັບຂອງຕົນ.

ຈ ແລະ ຊາວນີໄຟຈຶ່ງຢູ່ໃນສະພາບທີ່ເປັນອັນຕະລາຍດັ່ງນີ້ໃນ ທ້າຍປີທີຊາວຫົກແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນ ຂອງນີໄຟ.

And he also sent orders unto him that he should fortify the land Bountiful, and secure the narrow pass which led into the land northward, lest the Lamanites should obtain that point and should have power to harass them on every side.

And Moroni also sent unto him, desiring him that he would be faithful in maintaining that quarter of the land, and that he would seek every opportunity to scourge the Lamanites in that quarter, as much as was in his power, that perhaps he might take again by stratagem or some other way those cities which had been taken out of their hands; and that he also would fortify and strengthen the cities round about, which had not fallen into the hands of the Lamanites.

And he also said unto him, I would come unto you, but behold, the Lamanites are upon us in the borders of the land by the west sea; and behold, I go against them, therefore I cannot come unto you.

Now, the king (Ammoron) had departed out of the land of Zarahemla, and had made known unto the queen concerning the death of his brother, and had gathered together a large number of men, and had marched forth against the Nephites on the borders by the west sea.

And thus he was endeavoring to harass the Nephites, and to draw away a part of their forces to that part of the land, while he had commanded those whom he had left to possess the cities which he had taken, that they should also harass the Nephites on the borders by the east sea, and should take possession of their lands as much as it was in their power, according to the power of their armies.

And thus were the Nephites in those dangerous circumstances in the ending of the twenty and sixth year of the reign of the judges over the people of Nephi.

ແຕ່ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນໃນປີທີຊາວເຈັດແຫ່ງການປົກຄອງຂອງຜູ້ຕັດສິນ, ຄືທີອານຄຳ, ໂດຍຄຳສັ່ງຂອງໂມໂຣໄນ—ຜູ້ທີ່ຈັດຕັ້ງກອງທັບຂຶ້ນເພື່ອປ້ອງກັນຊາຍແດນທາງໃຕ້ ແລະ ທາງຕາເວັນຕົກຂອງແຜ່ນດິນ, ແລະ ໄດ້ເລີ່ມເດີນທັບຂອງເພິ່ນມຸ້ງໜ້າໄປຫາແຜ່ນດິນອຸດົມສົມບູນ, ເພື່ອວ່າເພິ່ນຈະໄດ້ຊ່ວຍເຫລືອທີອານຄຳ ແລະ ກອງທັບຂອງລາວໃນການໄປຕີເອົາເມືອງທີ່ສູນເສຍໄປນັ້ນຄືນມາ—

ແລະ ເຫດການໄດ້ບັງເກີດຂຶ້ນຄື ທີອານຄຳໄດ້ຮັບຄຳສັ່ງໃຫ້ເຂົ້າຕີເອົາເມືອງມິວເລັກ, ແລະ ໃຫ້ຕີເອົາມັນຄືນມາຖ້າຫາກເປັນໄປໄດ້.

ແລະ ເຫດການໄດ້ບັງເກີດຂຶ້ນຄື ທີອານຄຳໄດ້ຕຽມພ້ອມທີ່ຈະເຂົ້າໂຈມຕີເມືອງມິວເລັກ, ແລະ ໄດ້ອອກເດີນທາງພ້ອມດ້ວຍກອງທະຫານຂອງລາວເພື່ອໄປສູ້ຮົບກັບຊາວເລມັນ; ແຕ່ລາວເຫັນວ່າມັນເປັນໄປບໍ່ໄດ້ທີ່ຈະເອົາຊະນະພວກສັດຕູ ໃນຂະນະທີ່ພວກນັ້ນຢູ່ໃນບ່ອນປ້ອງກັນຂອງພວກເຂົາ; ສະນັ້ນ ລາວຈຶ່ງໄດ້ລົ້ມເລີກແຜນການຂອງລາວ ແລະ ກັບຄືນໄປຫາເມືອງອຸດົມສົມບູນຄືເກົ່າ, ເພື່ອລໍຖ້າການມາຂອງໂມໂຣໄນ, ເພື່ອລາວຈະໄດ້ຮັບກຳລັງເພີ່ມກອງທັບຂອງລາວອີກ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນໄດ້ມາຮອດແຜ່ນດິນອຸດົມສົມບູນພ້ອມດ້ວຍກອງທັບຂອງເພິ່ນ, ໃນຕອນທ້າຍປີທີຊາວເຈັດແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟ.

ແລະ ໃນຕົ້ນປີທີຊາວແປດ, ໂມໂຣໄນ ແລະ ທີອານຄຳພ້ອມດ້ວຍຫົວໜ້ານາຍທະຫານຫລາຍຄົນໄດ້ມີກອງປະຊຸມປຶກສາຫາລືກັນເລື່ອງສົງຄາມ—ວ່າພວກຕົນຈະເຮັດແນວໃດ ເພື່ອຈະໃຫ້ຊາວເລມັນອອກມາສູ້ຮົບກັບຕົນ; ຫລື ຊອກຫາວິທີໃດວິທີໜຶ່ງທີ່ຈະລໍ້ໃຫ້ພວກນັ້ນອອກມາຈາກທີ່ໝັ້ນຂອງພວກເຂົາ, ເພື່ອຕົນຈະໄດ້ປຽບສັດຕູ ແລະ ຍຶດເອົາເມືອງມິວເລັກນັ້ນກັບຄືນມາ.

ແລະ ເຫດການໄດ້ບັງເກີດຂຶ້ນ ພວກເຂົາໄດ້ສົ່ງຄະນະທູດໄປຫາກອງທັບຂອງຊາວເລມັນ, ຊຶ່ງປົກປ້ອງເມືອງມິວເລັກຢູ່ ເພື່ອສັ່ງຄວາມໄປຫາຫົວໜ້າຂອງຊາວເລມັນຜູ້ມີຊື່ວ່າ ຢາໂຄບ, ໂດຍປາດຖະໜາໃຫ້ລາວພ້ອມດ້ວຍກອງທັບຂອງລາວອອກມາ ເພື່ອມາພົບກັບຕົນຢູ່ໃນທົ່ງພຽງ ຊຶ່ງຢູ່ລະຫວ່າງສອງເມືອງນັ້ນ. ແຕ່ຈົ່ງເບິ່ງຢາໂຄບຜູ້ເປັນຊາວໂຊຣຳບໍ່ຍອມອອກມາພ້ອມດ້ວຍກອງທັບຂອງລາວ, ເພື່ອພົບກັບພວກນັ້ນຢູ່ໃນບ່ອນທີ່ຮາບພຽງ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອໂມໂຣໄນໂດຍໝົດຫວັງທີ່ຈະໄດ້ພົບກັບຊາວເລມັນຢູ່ໃນບ່ອນຊຶ່ງບໍ່ມີຜູ້ໃດໄດ້ປຽບກັນ, ສະນັ້ນ, ເພິ່ນຈຶ່ງຕົກລົງໃຈເຮັດຕາມແຜນທີ່ເພິ່ນຈະຫລອກລວງຊາວເລມັນໃຫ້ອອກມາຈາກທີ່ໝັ້ນຂອງພວກເຂົາ.

But behold, it came to pass in the twenty and seventh year of the reign of the judges, that Teancum, by the command of Moroni—who had established armies to protect the south and the west borders of the land, and had begun his march towards the land Bountiful, that he might assist Teancum with his men in retaking the cities which they had lost—

And it came to pass that Teancum had received orders to make an attack upon the city of Mulek, and retake it if it were possible.

And it came to pass that Teancum made preparations to make an attack upon the city of Mulek, and march forth with his army against the Lamanites; but he saw that it was impossible that he could overpower them while they were in their fortifications; therefore he abandoned his designs and returned again to the city Bountiful, to wait for the coming of Moroni, that he might receive strength to his army.

And it came to pass that Moroni did arrive with his army at the land of Bountiful, in the latter end of the twenty and seventh year of the reign of the judges over the people of Nephi.

And in the commencement of the twenty and eighth year, Moroni and Teancum and many of the chief captains held a council of war—what they should do to cause the Lamanites to come out against them to battle; or that they might by some means flatter them out of their strongholds, that they might gain advantage over them and take again the city of Mulek.

And it came to pass they sent embassies to the army of the Lamanites, which protected the city of Mulek, to their leader, whose name was Jacob, desiring him that he would come out with his armies to meet them upon the plains between the two cities. But behold, Jacob, who was a Zoramite, would not come out with his army to meet them upon the plains.

And it came to pass that Moroni, having no hopes of meeting them upon fair grounds, therefore, he resolved upon a plan that he might decoy the Lamanites out of their strongholds.

ຄ ສະນັ້ນ ເພີ່ນຈຶ່ງໄດ້ໃຫ້ທີອານຄຳນຳເອົາທະຫານຈຳນວນ
ໜ້ອຍໜຶ່ງເດີນທັບລົງໄປໃກ້ຝັ່ງທະເລ; ແລະ ໃນຕອນກາງຄືນ
ໂມໂຣໄນພ້ອມດ້ວຍກອງທັບຂອງເພີ່ນໄດ້ເດີນທັບເຂົ້າໄປໃນ
ຖິ່ນແຫ້ງແລ້ງກັນດານທາງຕາເວັນຕົກຂອງເມືອງມິວເລັກ;
ແລະ ໃນມື້ຕໍ່ມາ, ເມື່ອທະຫານຍາມຂອງຊາວເລມັນເຫັນທີອານ
ຄຳ, ພວກເຂົາຈຶ່ງໄດ້ແລ່ນໄປບອກຢາໂຄບຜູ້ເປັນນາຍຂອງ
ພວກເຂົາ.

ຄມ ແລະ ເຫດການໄດ້ບັງເກີດຂຶ້ນຄື ກອງທັບຂອງຊາວເລມັນໄດ້
ຍົກທັບມາຕໍ່ສູ້ກັບທີອານຄຳ, ໂດຍຄິດວ່າຈຳນວນຄົນຂອງລາວ
ບໍ່ຫລາຍ ແລະ ພວກເຂົາຈະເອົາຊະນະທີອານຄຳໄດ້. ແລະ ໃນ
ເມື່ອທີອານຄຳເຫັນກອງທັບຂອງຊາວເລມັນຍົກມາຕໍ່ສູ້ກັບຕົນ
ລາວກໍເລີ່ມຖອຍທັບຂອງລາວລົງໄປຫາຫາດຊາຍທະເລຂຶ້ນໄປ
ທາງເໜືອ.

ຄຄ ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາຊາວເລມັນເຫັນວ່າທີ
ອານຄຳຖອຍໜີໄປ, ພວກເຂົາຈຶ່ງມີກຳລັງໃຈ ແລະ ໄລ່ຕາມໄປ
ຢ່າງບໍ່ຢຸດຢັ້ງ. ແລະ ຂະນະທີ່ທີອານຄຳກຳລັງລໍ້ຊາວເລມັນຜູ້
ກຳລັງໄລ່ຕາມພວກເຂົາມາໂດຍບໍ່ມີປະໂຫຍດຢູ່ນັ້ນ, ຈົ່ງເບິ່ງ,
ໂມໂຣໄນກໍໄດ້ສັ່ງໃຫ້ພາກສ່ວນໜຶ່ງຂອງກອງທັບຊຶ່ງຢູ່ກັບເພີ່ນ
ຍົກເຂົ້າໄປໃນເມືອງ ແລະ ເຂົ້າຍຶດເອົາເມືອງນັ້ນ.

ຄຄ ແລະ ພວກເຂົາໄດ້ເຂົ້າຍຶດເອົາເມືອງດັ່ງນັ້ນ ແລະ ໄດ້ຂ້າຄົນ
ທັງໝົດທີ່ຖືກປະໄວ້ປ້ອງກັນເມືອງນັ້ນ, ແທ້ຈິງແລ້ວ, ໄດ້ຂ້າຄົນ
ທັງໝົດທີ່ບໍ່ຍອມມອບອາວຸດແຫ່ງສົງຄາມຂອງພວກເຂົາ.

ຄຜ ແລະ ໂມໂຣໄນຈຶ່ງໄດ້ເມືອງມິວເລັກຄືນມາໂດຍພາກສ່ວນ
ໜຶ່ງຂອງກອງທັບຂອງເພີ່ນດັ່ງນີ້, ໃນເວລາດຽວກັນນັ້ນ ເພີ່ນ
ໄດ້ເດີນທັບໄປພ້ອມກຳລັງທີ່ເຫລືອຢູ່ເພື່ອພົບກັບຊາວເລມັນ
ເວລາພວກເຂົາກັບຄືນມາຈາກການໄລ່ຕາມທີອານຄຳ.

ຄກ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນໄດ້ໄລ່ຕາມທີອານ
ຄຳຈົນມາຮອດໃກ້ເມືອງອຸດົມສົມບູນ, ແລະ ເມື່ອພວກເຂົາໄດ້
ພົບກັບລີໄຮ ແລະ ກອງທັບຈຳນວນໜ້ອຍໜຶ່ງ, ຊຶ່ງຖືກປະໄວ້
ປ້ອງກັນເມືອງອຸດົມສົມບູນ.

ຄຂ ແລະ ບັດນີ້ຈົ່ງເບິ່ງ, ເວລາຫົວໜ້ານາຍທະຫານຂອງຊາວເລ
ມັນເຫັນລີໄຮພ້ອມດ້ວຍກອງທັບຂອງລາວມາຕໍ່ສູ້ກັບຕົນ,
ພວກເຂົາກໍໄດ້ໜີໄປດ້ວຍຄວາມສັບສົນຫລາຍ, ເພາະຢ້ານວ່າ
ພວກຕົນຈະເຂົ້າເມືອງມິວເລັກບໍ່ທັນກ່ອນທີ່ລີໄຮຈະຕິດຕາມມາ
ທັນ; ເພາະວ່າພວກເຂົາອ່ອນເພຍຫລາຍຍ້ອນການເດີນທັບ,
ແລະ ຄົນຂອງລີໄຮຍັງແຂງແຮງຢູ່.

ຄງ ບັດນີ້ຊາວເລມັນບໍ່ຮູ້ຈັກວ່າໂມໂຣໄນກຳລັງລໍ້ຢູ່ທາງຫລັງ
ຂອງຕົນພ້ອມດ້ວຍກອງທັບຂອງເພີ່ນ; ແລະ ພວກເຂົາມີແຕ່
ຟາງຢ້ານລີໄຮ ແລະ ທະຫານຂອງລາວ.

Therefore he caused that Teancum should take a small number of men and march down near the seashore; and Moroni and his army, by night, marched in the wilderness, on the west of the city Mulek; and thus, on the morrow, when the guards of the Lamanites had discovered Teancum, they ran and told it unto Jacob, their leader.

And it came to pass that the armies of the Lamanites did march forth against Teancum, supposing by their numbers to overpower Teancum because of the smallness of his numbers. And as Teancum saw the armies of the Lamanites coming out against him he began to retreat down by the seashore, northward.

And it came to pass that when the Lamanites saw that he began to flee, they took courage and pursued them with vigor. And while Teancum was thus leading away the Lamanites who were pursuing them in vain, behold, Moroni commanded that a part of his army who were with him should march forth into the city, and take possession of it.

And thus they did, and slew all those who had been left to protect the city, yea, all those who would not yield up their weapons of war.

And thus Moroni had obtained possession of the city Mulek with a part of his army, while he marched with the remainder to meet the Lamanites when they should return from the pursuit of Teancum.

And it came to pass that the Lamanites did pursue Teancum until they came near the city Bountiful, and then they were met by Lehi and a small army, which had been left to protect the city Bountiful.

And now behold, when the chief captains of the Lamanites had beheld Lehi with his army coming against them, they fled in much confusion, lest perhaps they should not obtain the city Mulek before Lehi should overtake them; for they were wearied because of their march, and the men of Lehi were fresh.

Now the Lamanites did not know that Moroni had been in their rear with his army; and all they feared was Lehi and his men.

ມ໖ ບັດນີ້ລີໄຮບໍ່ປາດຖະໜາທີ່ຈະຕິດຕາມໄປໃຫ້ທັນພວກເຂົາ ຈົນກວ່າພວກເຂົາຈະໄດ້ພົບກັບໂມໂຣໄນ ແລະ ກອງທັບຂອງ ເພີ່ນເສຍກ່ອນ.

ມ໖ Now Lehi was not desirous to overtake them till they should meet Moroni and his army.

ມ໖ ແລະ ເຫດການໄດ້ບັງເກີດຂຶ້ນຄື ກ່ອນທີ່ຊາວເລມັນຈະຖອຍ ໄປໄດ້ໄກ ກໍຖືກຊາວນີໄຟລ້ອມໄວ້ດ້ານໜຶ່ງໂດຍທະຫານຂອງ ໂມໂຣໄນ, ແລະ ອີກດ້ານໜຶ່ງແມ່ນທະຫານຂອງລີໄຮ, ຊຶ່ງ ທັງໝົດນີ້ຍັງແຂງແຮງໝົດ ແລະ ມີກຳລັງເຕັມທີ່; ແຕ່ວ່າຊາວ ເລມັນອ່ອນເພຍຫລາຍຍ້ອນການເດີນທັບມາໄກ.

And it came to pass that before the Lamanites had retreated far they were surrounded by the Nephites, by the men of Moroni on one hand, and the men of Lehi on the other, all of whom were fresh and full of strength; but the Lamanites were wearied because of their long march.

ມ໖ ແລະ ໂມໂຣໄນໄດ້ສັ່ງຄົນຂອງເພີ່ນໃຫ້ໂຈມຕີຊາວເລມັນຈົນ ວ່າພວກເຂົາຈະຍອມມອບອາວຸດແຫ່ງສົງຄາມຂອງພວກເຂົາ ໃຫ້.

And Moroni commanded his men that they should fall upon them until they had given up their weapons of war.

ມ໖ ແລະ ເຫດການໄດ້ບັງເກີດຂຶ້ນຄື ຢາໂຄບໂດຍທີ່ເປັນຜູ້ນຳ ຂອງຊາວເລມັນ, ໂດຍທີ່ເປັນ ຊາວໂຊຣຳ ແລະ ໂດຍທີ່ມີວິນຍານ ທີ່ບໍ່ຍອມເສຍໄຊ, ລາວຈຶ່ງໄດ້ນຳເອົາຊາວເລມັນອອກໄປສູ້ຮົບ ກັບໂມໂຣໄນດ້ວຍຄວາມໂມໂຫຮ້າຍ.

And it came to pass that Jacob, being their leader, being also a Zoramite, and having an unconquerable spirit, he led the Lamanites forth to battle with exceeding fury against Moroni.

ມ໖ ໂດຍທີ່ໂມໂຣໄນຢູ່ໃນເສັ້ນທາງເດີນທັບຂອງພວກເລມັນ, ສະນັ້ນ ຢາໂຄບຈຶ່ງຕັ້ງໃຈຈະຂ້າພວກເຂົາ ແລະ ຕີຜ່າອອກໄປຫາ ເມືອງມິວເລັກ. ແຕ່ຈົ່ງເບິ່ງ, ໂມໂຣໄນ ແລະ ທະຫານຂອງເພີ່ນມີ ກຳລັງຫລາຍກວ່າ; ສະນັ້ນ ຊາວນີໄຟຈຶ່ງບໍ່ເປີດທາງໃຫ້ແກ່ຊາວ ເລມັນ.

Moroni being in their course of march, therefore Jacob was determined to slay them and cut his way through to the city of Mulek. But behold, Moroni and his men were more powerful; therefore they did not give way before the Lamanites.

ມ໖ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຕໍ່ສູ້ກັນຢ່າງ ດຸເດືອດທັງສອງຝ່າຍ; ແລະ ທັງສອງຝ່າຍມີຄົນຖືກຂ້າຕາຍ ເປັນຈຳນວນຫລວງຫລາຍ; ແທ້ຈິງແລ້ວ, ແລະ ໂມໂຣໄນໄດ້ຮັບ ບາດເຈັບ ແລະ ຢາໂຄບຖືກຂ້າຕາຍ.

And it came to pass that they fought on both hands with exceeding fury; and there were many slain on both sides; yea, and Moroni was wounded and Jacob was killed.

ມ໖ ແລະ ລີໄຮໄດ້ອ້ອມເຂົ້າຕີທາງດ້ານຫລັງຂອງພວກສັດຕູດ້ວຍ ກອງທະຫານທີ່ມີກຳລັງຂອງລາວ, ດ້ວຍຄວາມໂມໂຫທີ່ສຸດຈົນ ເຮັດໃຫ້ກອງທັບຫລັງຂອງຊາວເລມັນຍອມມອບອາວຸດແຫ່ງ ສົງຄາມຂອງຕົນ; ແລະ ສ່ວນທີ່ເຫລືອຢູ່ນັ້ນກໍສັບສົນກັນຢູ່ບໍ່ຮູ້ ວ່າຈະໜີໄປ ຫລື ຈະຕໍ່ສູ້.

And Lehi pressed upon their rear with such fury with his strong men, that the Lamanites in the rear delivered up their weapons of war; and the remainder of them, being much confused, knew not whither to go or to strike.

ມ໖ ບັດນີ້ໂມໂຣໄນເຫັນຄວາມສັບສົນຂອງຊາວເລມັນ, ເພີ່ນຈຶ່ງ ໄດ້ເວົ້າກັບພວກເຂົາວ່າ: ຖ້າຫາກພວກເຈົ້າຈະນຳເອົາອາວຸດ ແຫ່ງສົງຄາມມາມອບໃຫ້ແກ່ພວກເຮົາ, ຈົ່ງເບິ່ງ ພວກເຮົາຈະ ໄວ້ຊີວິດຂອງພວກເຈົ້າ.

Now Moroni seeing their confusion, he said unto them: If ye will bring forth your weapons of war and deliver them up, behold we will forbear shedding your blood.

ມ໖ ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາຊາວເລມັນໄດ້ຍິນ ຂໍ້ຄວາມນີ້ແລ້ວ, ຫົວໜ້ານາຍທະຫານຂອງພວກເຂົາທັງໝົດ ທີ່ບໍ່ໄດ້ຖືກຂ້າຕາຍ ຈຶ່ງໄດ້ອອກມາ ແລະ ໂຍນອາວຸດແຫ່ງ ສົງຄາມໄວ້ທີ່ຕີນຂອງໂມໂຣໄນ, ແລະ ໄດ້ສັ່ງໃຫ້ທະຫານຂອງ ຕົນກະທຳແບບດຽວກັນ.

And it came to pass that when the Lamanites had heard these words, their chief captains, all those who were not slain, came forth and threw down their weapons of war at the feet of Moroni, and also commanded their men that they should do the same.

ມ.ຍ ແຕ່ຈົ່ງເບິ່ງ, ມີຫລາຍຄົນທີ່ບໍ່ຍອມເຮັດ; ແລະ ພວກທີ່ບໍ່ຍອມ
ມອບດາບຂອງພວກເຂົາ ຈົ່ງໄດ້ຖືກຈັບ ແລະ ມັດໄວ້, ແລະ
ອາວຸດແຫ່ງສົງຄາມຂອງພວກເຂົາກໍຖືກຍຶດໄປຈາກພວກເຂົາ,
ແລະ ພວກເຂົາໄດ້ຖືກບັງຄັບໃຫ້ເດີນທາງພ້ອມດ້ວຍພີ່ນ້ອງ
ຂອງພວກເຂົາໄປຫາແຜ່ນດິນອຸດົມສົມບູນ.

ຄ.ດ ແລະ ບັດນີ້ຈຳນວນຊະເລີຍເສີກທີ່ຈັບໄດ້ນັ້ນມີຈຳນວນຫລາຍ
ກວ່າຈຳນວນຂອງຜູ້ທີ່ຖືກຂ້າຕາຍ, ແທ້ຈິງແລ້ວ, ມັນມີ
ຈຳນວນຫລາຍກວ່າຄົນທັງສອງຝ່າຍທີ່ຖືກຂ້າຕາຍໄປນັ້ນ.

But behold, there were many that would not; and those who would not deliver up their swords were taken and bound, and their weapons of war were taken from them, and they were compelled to march with their brethren forth into the land Bountiful.

And now the number of prisoners who were taken exceeded more than the number of those who had been slain, yea, more than those who had been slain on both sides.

ແອວມາ ໕ມ

Alma 53

And it came to pass that they did set guards over the prisoners of the Lamanites, and did compel them to go forth and bury their dead, yea, and also the dead of the Nephites who were slain; and Moroni placed men over them to guard them while they should perform their labors.

And Moroni went to the city of Mulek with Lehi, and took command of the city and gave it unto Lehi. Now behold, this Lehi was a man who had been with Moroni in the more part of all his battles; and he was a man like unto Moroni, and they rejoiced in each other's safety; yea, they were beloved by each other, and also beloved by all the people of Nephi.

And it came to pass that after the Lamanites had finished burying their dead and also the dead of the Nephites, they were marched back into the land Bountiful; and Teancum, by the orders of Moroni, caused that they should commence laboring in digging a ditch round about the land, or the city, Bountiful.

And he caused that they should build a breastwork of timbers upon the inner bank of the ditch; and they cast up dirt out of the ditch against the breastwork of timbers; and thus they did cause the Lamanites to labor until they had encircled the city of Bountiful round about with a strong wall of timbers and earth, to an exceeding height.

And this city became an exceeding stronghold ever after; and in this city they did guard the prisoners of the Lamanites; yea, even within a wall which they had caused them to build with their own hands. Now Moroni was compelled to cause the Lamanites to labor, because it was easy to guard them while at their labor; and he desired all his forces when he should make an attack upon the Lamanites.

๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຈັດຄົນໄວ້ເພື່ອເຝົ້າຍາມຊະເລີຍເສີກຊາວເລມັນ, ແລະ ໄດ້ບັງຄັບໃຫ້ພວກເຂົາອອກໄປຝັງສົບຜູ້ຄົນຂອງພວກເຂົາຜູ້ທີ່ຖືກຂ້າຕາຍ, ແທ້ຈິງແລ້ວ, ພວກເຂົາໄດ້ຝັງສົບຂອງຊາວນີໄຟນຳອີກ; ແລະ ໂມໂຣໄນໄດ້ຈັດຄົນໄວ້ເພື່ອເຝົ້າຍາມພວກເຂົາໃນຂະນະທີ່ພວກເຂົາກຳລັງອອກແຮງງານຢູ່ນັ້ນ.

๒ ແລະ ໂມໂຣໄນໄດ້ໄປຫາເມືອງມິວເລັກກັບລີໄຮ, ແລະ ເຂົ້າຍຶດເອົາເມືອງນີ້ ແລະ ມອບເມືອງໃຫ້ລີໄຮປົກຄອງ. ບັດນີ້ຈົ່ງເບິ່ງ, ລີໄຮຜູ້ນີ້ຄືຜູ້ທີ່ສູ້ຮົບຢູ່ຮ່ວມກັບໂມໂຣໄນຕະຫລອດມາໃນສະໜາມຮົບທັງໝົດຂອງລາວ; ແລະ ລາວກໍເປັນຄົນ ເໝືອນດັ່ງໂມໂຣໄນ ແລະ ທັງສອງຄົນນີ້ປົຕິຍິນດີໃນຄວາມປອດໄພຂອງກັນແລະກັນ; ແທ້ຈິງແລ້ວ, ຄົນທັງສອງກໍຮັກແພງກັນຫລາຍ, ແລະ ເປັນທີ່ຮັກຫອມຂອງຜູ້ຄົນຂອງນີໄຟທັງໝົດນຳອີກ.

๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກຊາວເລມັນສຳເລັດການຝັງສົບຄົນຕາຍຂອງພວກເຂົາ ແລະ ຂອງຊາວນີໄຟແລ້ວ, ພວກເຂົາໄດ້ຖືກສົ່ງໄປຫາແຜ່ນດິນອຸດົມສົມບູນ; ແລະ ທີອານຄຳ, ໂດຍຄຳສັ່ງຂອງໂມໂຣໄນ, ຈົ່ງໃຫ້ພວກເຂົາເລີ່ມອອກແຮງງານເຮັດຄັນຄູຮອບແຜ່ນດິນ ຫລື ຮອບເມືອງອຸດົມສົມບູນ.

๔ ແລະ ລາວໄດ້ສັ່ງໃຫ້ພວກເຂົາສ້າງ ກຳແພງທີ່ເຮັດດ້ວຍທ່ອນໄມ້ຂຶ້ນຂ້າງໃນຂອງຄັນຄູ; ແລະ ພວກເຂົາໄດ້ຂຸດດິນຄູນໃສ່ກຳແພງທີ່ເຮັດດ້ວຍໄມ້ນັ້ນ; ແລະ ພວກເຂົາໄດ້ໃຫ້ຊາວເລມັນອອກແຮງງານໄປແບບນີ້ ຈົນວ່າພວກເຂົາໄດ້ເຮັດກຳແພງອ້ອມເມືອງອຸດົມສົມບູນໄວ້ໂດຍຮອບ ແລະ ມັນສູງຂຶ້ນຫລາຍດ້ວຍກຳແພງອັນແຂງແກ່ນທີ່ເຮັດດ້ວຍໄມ້ທ່ອນ ແລະ ດິນ.

๕ ແລະ ເມືອງນີ້ຈຶ່ງກາຍມາເປັນທີ່ໝັ້ນອັນແຂງແກ່ນທີ່ສຸດນັບຕັ້ງແຕ່ເວລານັ້ນມາ; ແລະ ພວກເຂົາໄດ້ກັກຂັງພວກຊະເລີຍເສີກຊາວເລມັນໄວ້ໃນເຂດກຳແພງເມືອງນີ້; ແທ້ຈິງແລ້ວ, ແມ່ນແຕ່ໃນເຂດກຳແພງເມືອງຊຶ່ງຊາວນີໄຟໄດ້ໃຫ້ຊາວເລມັນສ້າງຂຶ້ນດ້ວຍມືຂອງພວກເຂົາເອງ. ບັດນີ້ໂມໂຣໄນຈຳຕ້ອງໃຫ້ຊາວເລມັນອອກແຮງງານ, ເພາະວ່າມັນງ່າຍທີ່ຈະຮັກສາພວກຊະເລີຍເສີກນັ້ນຂະນະທີ່ພວກເຂົາອອກແຮງງານ; ແລະ ເພິ່ນໃຫ້ກຳລັງທັບທັງໝົດຂອງເພິ່ນຕຽມພ້ອມຢູ່ເມື່ອເຖິງເວລາທີ່ເພິ່ນຈະເຂົ້າໄປໂຈມຕີຊາວເລມັນ.

ຜ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນໄດ້ເອົາຊະນະ ກອງທັບທີ່ຍິ່ງໃຫຍ່ທີ່ສຸດກອງໜຶ່ງຂອງຊາວເລມັນ, ແລະ ໄດ້ເຂົ້າຍຶດເອົາເມືອງມິວເລັກ ຊຶ່ງເປັນທີ່ໝັ້ນອັນແຂງແກ່ນທີ່ສຸດ ບ່ອນໜຶ່ງຂອງຊາວເລມັນໃນແຜ່ນດິນນີໄຟ; ແລະ ເພິ່ນໄດ້ສ້າງ ຄຸກຂຶ້ນສຳລັບເປັນບ່ອນກັກຂັງຊະເລີຍເສີກຂອງເພິ່ນ.

ການ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນບໍ່ພະຍາຍາມທີ່ຈະສູ້ ຮົບກັບຊາວເລມັນອີກຕໍ່ໄປໃນປີນັ້ນ, ແຕ່ເພິ່ນໃຫ້ທະຫານຂອງ ເພິ່ນຕຽມພ້ອມທີ່ຈະເຮັດເສີກ, ແທ້ຈິງແລ້ວ, ແລະ ໄດ້ໃຫ້ສ້າງ ບ່ອນປ້ອງກັນເພື່ອຕ້ານທານກັບຊາວເລມັນ, ແທ້ຈິງແລ້ວ, ແລະ ກໍໄດ້ໃຫ້ພວກຜູ້ຊາຍຊ່ວຍເຫລືອພວກແມ່ຍິງຂອງພວກ ເຂົາ ແລະ ເດັກນ້ອຍຂອງພວກເຂົາໃຫ້ພົ້ນຈາກຄວາມອຶດຢາກ ແລະ ຄວາມທຸກ, ແລະ ໃຫ້ຜູ້ຄົນຈັດຫາອາຫານໃຫ້ແກ່ ກອງທັບຂອງຊາວນີໄຟນຳອີກ.

ຊ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ໃນຂະນະທີ່ໂມໂຣໄນບໍ່ ໄດ້ຢູ່ນຳພວກເຂົານັ້ນ, ມັນໄດ້ມີການສວມຮູ້ຮ່ວມຄິດກັນຂຶ້ນໃນ ບັນດາຊາວນີໄຟ ຊຶ່ງພາໃຫ້ເກີດການແຕກແຍກກັນຂຶ້ນ, ດັ່ງນັ້ນ ກອງທັບຂອງຊາວເລມັນຈຶ່ງໄດ້ປຽບຊາວນີໄຟຂຶ້ນມາ, ແທ້ຈິງ ແລ້ວ, ເຖິງຂະໜາດທີ່ພວກເຂົາໄດ້ເຂົ້າຄອບຄອງຫົວເມືອງຕ່າງ ໆທີ່ຢູ່ໃນແຜ່ນດິນທາງໃຕ້ໃກ້ທະເລທາງຕາເວັນຕົກ.

ຌ ແລະ ນີ້ກໍຍ້ອນວ່າຄວາມຊົ່ວຮ້າຍໃນບັນດາພວກເຂົາເອງ, ແທ້ຈິງແລ້ວ, ຍ້ອນວ່າມັນໄດ້ມີການແຕກແຍກ ແລະ ມີການ ສວມຮູ້ຮ່ວມຄິດກັນໃນບັນດາພວກເຂົາເອງ ພວກເຂົາຈຶ່ງຕົກ ຢູ່ໃນສະພາບທີ່ເປັນອັນຕະລາຍທີ່ສຸດ.

ຍ ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າມີບາງຢ່າງທີ່ຈະເວົ້າກ່ຽວກັບ ຜູ້ຄົນຂອງອຳໂມນ, ຊຶ່ງແຕ່ກ່ອນຜູ້ຄົນເຫລົ່ານີ້ເຄີຍເປັນຊາວເລ ມັນ; ແຕ່ໂດຍອຳໂມນ ແລະ ພີ່ນ້ອງຂອງເພິ່ນ, ຫລື ຈະເວົ້າວ່າ ໂດຍອຳນາດ ແລະ ພຣະຄຳຂອງພຣະເຈົ້າ, ພວກເຂົາຈຶ່ງ ປ່ຽນ ໃຈເຫລື້ອມໃສໃນພຣະຜູ້ເປັນເຈົ້າ; ແລະ ພວກເຂົາຖືກນຳພາ ລົງມາຫາແຜ່ນດິນເຊຣາເຮັມລາ ແລະ ໄດ້ຮັບການຄຸ້ມຄອງຈາກ ຊາວນີໄຟນັບແຕ່ເວລານັ້ນມາ.

ຍເອ ແລະ ເປັນຍ້ອນຄຳສາບານຂອງພວກເຂົາ, ພວກເຂົາຈຶ່ງໄດ້ ເວັ້ນຈາກການຈັບອາວຸດທີ່ຈະຕໍ່ສູ້ກັບພີ່ນ້ອງຂອງຕົນ; ເພາະ ພວກເຂົາເຮັດຄຳສາບານໄວ້ວ່າຈະບໍ່ຂ້າຟັນ ອີກເລີຍ; ແລະ ເພາະຕາມຄຳສາບານຂອງພວກເຂົາ, ພວກເຂົາຈະຍອມຕາຍ; ແທ້ຈິງແລ້ວ, ພວກເຂົາຈະຍອມຕົວໃຫ້ຕົກຢູ່ໃນມືຂອງພີ່ນ້ອງ ຂອງພວກເຂົາຖ້າຫາກບໍ່ແມ່ນເພາະຄວາມສົງສານ ແລະ ຄວາມຮັກອັນລົ້ນເຫລືອຊຶ່ງອຳໂມນ ແລະ ພີ່ນ້ອງຂອງເພິ່ນມີ ເພື່ອພວກເຂົາ.

And it came to pass that Moroni had thus gained a victory over one of the greatest of the armies of the Lamanites, and had obtained possession of the city of Mulek, which was one of the strongest holds of the Lamanites in the land of Nephi; and thus he had also built a stronghold to retain his prisoners.

And it came to pass that he did no more attempt a battle with the Lamanites in that year, but he did employ his men in preparing for war, yea, and in making fortifications to guard against the Lamanites, yea, and also delivering their women and their children from famine and affliction, and providing food for their armies.

And now it came to pass that the armies of the Lamanites, on the west sea, south, while in the absence of Moroni on account of some intrigue amongst the Nephites, which caused dissensions amongst them, had gained some ground over the Nephites, yea, insomuch that they had obtained possession of a number of their cities in that part of the land.

And thus because of iniquity amongst themselves, yea, because of dissensions and intrigue among themselves they were placed in the most dangerous circumstances.

And now behold, I have somewhat to say concerning the people of Ammon, who, in the beginning, were Lamanites; but by Ammon and his brethren, or rather by the power and word of God, they had been converted unto the Lord; and they had been brought down into the land of Zarahemla, and had ever since been protected by the Nephites.

And because of their oath they had been kept from taking up arms against their brethren; for they had taken an oath that they never would shed blood more; and according to their oath they would have perished; yea, they would have suffered themselves to have fallen into the hands of their brethren, had it not been for the pity and the exceeding love which Ammon and his brethren had had for them.

ແລະ ເພາະເປັນດ້ວຍເຫດນີ້ ພວກເຂົາຈຶ່ງຖືກເອົາລົງມາຫາ ແຜ່ນດິນເຊຣາເຮັມລາ; ແລະ ພວກເຂົາຈຶ່ງໄດ້ຮັບ ການຄຸ້ມຄອງ ຈາກຊາວນີໄຟຕັ້ງແຕ່ນັ້ນມາ.

ແຕ່ເຫດການໄດ້ບັງເກີດຂຶ້ນຄື ເວລາພວກເຂົາເຫັນ ອັນຕະລາຍ, ແລະ ຄວາມທຸກ ແລະ ຄວາມຍາກລຳບາກຕ່າງໆ ນາໆຊຶ່ງຊາວນີໄຟຕ້ອງຮັບແທນຕົນ ພວກເຂົາກໍເກີດມີຄວາມ ເມດຕາສົງສານຂຶ້ນມາ ແລະ ປາດຖະໜາທີ່ຈະຈັບອາວຸດເພື່ອ ປ້ອງກັນປະເທດຊາດຂອງຕົນ.

ແຕ່ຈົ່ງເບິ່ງ, ເວລາພວກເຂົາກຳລັງຈະຈັບອາວຸດແຫ່ງ ສົງຄາມຂອງພວກເຂົາຂຶ້ນ, ພວກເຂົາກໍຖືກຮີລາມັນ ແລະ ພີ່ນ້ອງຂອງເພີ່ນຊັກຊວນບໍ່ໃຫ້ເຮັດເຊັ່ນນັ້ນ, ເພາະວ່າພວກເຂົາ ກຳລັງຈະ ເຮັດຜິດ ຄຳສາບານຂອງພວກເຂົາທີ່ໄດ້ເຮັດໄວ້.

ແລະ ຮີລາມັນຢ້ານວ່າ ຖ້າຂືນເຮັດ, ພວກເຂົາຈະສູນເສຍ ຈິດວິນຍານຂອງພວກເຂົາໄປ; ສະນັ້ນ ທຸກຄົນທີ່ໄດ້ເຂົ້າຢູ່ໃນ ພັນທະສັນຍານີ້ຈຶ່ງຕ້ອງທົນເບິ່ງພີ່ນ້ອງຂອງຕົນລຸຍໄປກັບ ຄວາມທຸກຂອງພວກເຂົາ, ໃນສະພາບທີ່ເປັນອັນຕະລາຍຢູ່ໃນ ຂະນະນີ້.

ແຕ່ຈົ່ງເບິ່ງ, ເຫດການໄດ້ບັງເກີດຂຶ້ນ ພວກເຂົາມີລູກຊາຍ ຫລາຍຄົນ, ຜູ້ຊຶ່ງບໍ່ໄດ້ເຂົ້າຢູ່ໃນພັນທະສັນຍາວ່າຈະບໍ່ຍອມຈັບ ອາວຸດແຫ່ງສົງຄາມເພື່ອປ້ອງກັນຕົນໃຫ້ພົ້ນຈາກສັດຕູ; ສະນັ້ນ ພວກເຂົາຈຶ່ງໄດ້ຈັບອາວຸດ, ແລະ ມາເຕົ້າໂຮມກັນໃນຕອນນີ້, ແລະ ພວກເຂົາເອີ້ນຕົວເອງວ່າ ຊາວນີໄຟ.

ແລະ ພວກເຂົາໄດ້ໃຫ້ພັນທະສັນຍາວ່າ ພວກເຂົາຈະຕໍ່ສູ້ເພື່ອ ເສລີພາບຂອງຊາວນີໄຟ, ແທ້ຈິງແລ້ວ, ເພື່ອປ້ອງກັນແຜ່ນດິນ ເຖິງແມ່ນວ່າພວກເຂົາຈະຕາຍກໍຕາມ; ແທ້ຈິງແລ້ວ, ພວກເຂົາ ໄດ້ໃຫ້ພັນທະສັນຍາວ່າ ພວກເຂົາຈະບໍ່ຍອມເສຍ ເສລີພາບ ຂອງພວກເຂົາໄປ, ແຕ່ວ່າຈະຕໍ່ສູ້ທຸກວິທີທາງເພື່ອຈະໄດ້ປ້ອງ ກັນຊາວນີໄຟ ແລະ ປ້ອງກັນຕົວເອງໃຫ້ພົ້ນຈາກຄວາມເປັນ ທາດ.

ບັດນີ້ຈົ່ງເບິ່ງ, ມີຊາຍໜຸ່ມທັງໝົດນຳກັນສອງພັນຄົນ, ຊຶ່ງ ໄດ້ເຂົ້າຢູ່ໃນພັນທະສັນຍານີ້ ແລະ ຈັບອາວຸດແຫ່ງສົງຄາມຂອງ ພວກເຂົາຂຶ້ນເພື່ອປ້ອງກັນປະເທດຊາດຂອງຕົນ.

ແລະ ບັດນີ້ຈົ່ງເບິ່ງ, ພວກເຂົາບໍ່ເຄີຍເຮັດໃຫ້ຊາວນີໄຟ ເສຍຫາຍມາກ່ອນເລີຍ, ແລະ ໃນເວລານີ້ ພວກເຂົາກໍມາເປັນ ຝ່າຍສະໜັບສະໜູນອັນກວ້າງຂວາງອີກ. ເພາະພວກເຂົາໄດ້ ຈັບອາວຸດແຫ່ງສົງຄາມຂອງພວກເຂົາຂຶ້ນ, ແລະ ພວກເຂົາຢາກ ໃຫ້ຮີລາມັນເປັນຜູ້ນຳຂອງພວກເຂົາ.

And for this cause they were brought down into the land of Zarahemla; and they ever had been protected by the Nephites.

But it came to pass that when they saw the danger, and the many afflictions and tribulations which the Nephites bore for them, they were moved with compassion and were desirous to take up arms in the defence of their country.

But behold, as they were about to take their weapons of war, they were overpowered by the persuasions of Helaman and his brethren, for they were about to break the oath which they had made.

And Helaman feared lest by so doing they should lose their souls; therefore all those who had entered into this covenant were compelled to behold their brethren wade through their afflictions, in their dangerous circumstances at this time.

But behold, it came to pass they had many sons, who had not entered into a covenant that they would not take their weapons of war to defend themselves against their enemies; therefore they did assemble themselves together at this time, as many as were able to take up arms, and they called themselves Nephites.

And they entered into a covenant to fight for the liberty of the Nephites, yea, to protect the land unto the laying down of their lives; yea, even they covenanted that they never would give up their liberty, but they would fight in all cases to protect the Nephites and themselves from bondage.

Now behold, there were two thousand of those young men, who entered into this covenant and took their weapons of war to defend their country.

And now behold, as they never had hitherto been a disadvantage to the Nephites, they became now at this period of time also a great support; for they took their weapons of war, and they would that Helaman should be their leader.

ຄ0 ແລະ ພວກເຂົາເປັນຊາຍໜຸ່ມທຸກຄົນ, ແລະ ພວກເຂົາເປັນຄົນ ກ້າຫານທີ່ສຸດ, ທັງດ້ານກຳລັງ ແລະ ຄວາມວ່ອງໄວ; ແຕ່ຈົ່ງເບິ່ງ, ນີ້ຍັງບໍ່ໝົດ—ພວກເຂົາເປັນຄົນທີ່ ເອົາການເອົາງານຢູ່ຕະຫລອດວັນເວລາ ບໍ່ວ່າອັນໃດກໍຕາມທີ່ພວກເຂົາໄດ້ຮັບມອບໝາຍ.

And they were all young men, and they were exceedingly valiant for courage, and also for strength and activity; but behold, this was not all—they were men who were true at all times in whatsoever thing they were entrusted.

ຄ1 ແທ້ຈິງແລ້ວ, ພວກເຂົາເປັນຄົນຊື່ສັດ ແລະ ມີສະຕິປັນຍາຫລາຍ, ເພາະວ່າພວກເຂົາໄດ້ຮັບການສິດສອນໃຫ້ຮັກສາພຣະບັນຍັດຂອງພຣະເຈົ້າ ແລະ ໃຫ້ ເດີນໄປຢ່າງພາກພູມໃຈຕໍ່ພຣະພັກຂອງພຣະອົງ.

Yea, they were men of truth and soberness, for they had been taught to keep the commandments of God and to walk uprightly before him.

ຄ2 ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຮີລາມັນໄດ້ເດີນທັບເປັນຜູ້ນຳກອງທະຫານໜຸ່ມ ສອງພັນຄົນຂອງເພີ່ນໄປຊ່ວຍຜູ້ຄົນທີ່ຊາຍແດນຂອງແຜ່ນດິນທາງໃຕ້ໃກ້ທະເລທາງຕາເວັນຕົກ.

And now it came to pass that Helaman did march at the head of his two thousand stripling soldiers, to the support of the people in the borders of the land on the south by the west sea.

ຄ3 ແລະ ປີທີຊາວແປດແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນສຸດລົງດັ່ງນີ້.

And thus ended the twenty and eighth year of the reign of the judges over the people of Nephi.

ແອວມາ ๕๔

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນຕົ້ນປີທີຊາວເກົ້າແຫ່ງ ການປົກຄອງຂອງຜູ້ຕັດສິນ, ຄື ອາມໂມຣອນໄດ້ສົ່ງຄຳຂໍຮ້ອງໄປ ຫາໂມໂຣໄນ ໂດຍປາດຖະໜາທີ່ຈະແລກປ່ຽນຊະເລີຍເສີກກັນ.

๘ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນຮູ້ສຶກປິຕິຍິນດີຢ່າງ ຍິ່ງໃນຄຳຂໍຮ້ອງນີ້ ເພາະວ່າເພິ່ນດີໃຈທີ່ຈະໄດ້ສະບຽງອາຫານທີ່ ເອົາໄປລ້ຽງຊະເລີຍເສີກຊາວເລມັນນັ້ນມາລ້ຽງຜູ້ຄົນຂອງເພິ່ນ ເອງ; ແລະ ເພິ່ນດີໃຈທີ່ຈະໄດ້ຜູ້ຄົນຂອງເພິ່ນຄືນມາເສີມກຳລັງ ກອງທັບຂອງເພິ່ນນຳອີກ.

๙ ບັດນີ້ຊາວເລມັນໄດ້ຈັບເອົາພວກແມ່ຍິງ ແລະ ເດັກນ້ອຍ ຫລາຍຄົນໄປເປັນຊະເລີຍເສີກ, ແຕ່ຊະເລີຍເສີກທັງໝົດຂອງໂມ ໂຣໄນ, ຫລື ວ່າພວກຊະເລີຍເສີກທີ່ໂມໂຣໄນຈັບມາບໍ່ມີພວກແມ່ ຍິງ ຫລື ເດັກນ້ອຍຈັກຄົນເລີຍ; ສະນັ້ນໂມໂຣໄນຈຶ່ງຕົກລົງໃຈໃຊ້ ກົນອຸບາຍເພື່ອຈະໄດ້ຊະເລີຍເສີກຊາວນີໄຟຈາກຊາວເລມັນ ໃຫ້ ຫລາຍທີ່ສຸດເທົ່າທີ່ຈະເປັນໄປໄດ້.

๑๐ ສະນັ້ນ ເພິ່ນຈຶ່ງໄດ້ຂຽນສານສະບັບໜຶ່ງ, ແລະ ສົ່ງໄປນຳຂ້າ ໃຊ້ຂອງອາມໂມຣອນ, ຊຶ່ງເປັນຜູ້ດຽວກັນກັບຜູ້ທີ່ຖືສານມາໃຫ້ �โมโรไน. ບັດນີ້ ນີ້ຄືຂໍ້ຄວາມຊຶ່ງເພິ່ນໄດ້ຂຽນເຖິງອາມໂມຣອນ, ມີຄວາມວ່າ:

๑๑ ຈົ່ງເບິ່ງ ອາມໂມຣອນ, ຂ້າພະເຈົ້າຂຽນຫາທ່ານກ່ຽວກັບ ສົງຄາມເທື່ອນີ້ ຊຶ່ງທ່ານເປັນຜູ້ສ້າງຂຶ້ນຕໍ່ຜູ້ຄົນຂອງຂ້າພະເຈົ້າ, ຫລື ວ່າແທ້ຈິງແລ້ວ ອ້າຍຂອງທ່ານເປັນຜູ້ສ້າງຂຶ້ນມາ, ແລະ ຊຶ່ງ ທ່ານຍັງຕັ້ງໃຈທີ່ຈະເຮັດຢູ່ຕໍ່ໄປ ເຖິງແມ່ນວ່າອ້າຍຂອງທ່ານໄດ້ ຕາຍໄປແລ້ວ.

๑๒ ຈົ່ງເບິ່ງ, ຂ້າພະເຈົ້າຈະບອກທ່ານບາງຢ່າງກ່ຽວກັບ ຄວາມ ຍຸດຕິທຳຂອງພຣະເຈົ້າ, ແລະ ດາບແຫ່ງພຣະພິโลດທີ່ຊົງລິດ ອຳນາດຍິ່ງໃຫຍ່ຂອງພຣະອົງ, ຊຶ່ງແຂວນຢູ່ເທິງຫົວຂອງທ່ານ ຖ້າຫາກທ່ານບໍ່ກັບໃຈ ແລະ ຖອນກອງທັບຂອງທ່ານກັບຄືນ ໄປແຜ່ນດິນຂອງທ່ານເອງ, ຫລືວ່າແຜ່ນດິນທີ່ທ່ານເປັນເຈົ້າ ຂອງ, ຄືແຜ່ນດິນນີໄຟນັ້ນ.

๑๓ ແທ້ຈິງແລ້ວ, ຂ້າພະເຈົ້າຈະບອກທ່ານເຖິງເລື່ອງນີ້ ຖ້າຫາກ ທ່ານສາມາດທີ່ຈະເຊື່ອຟັງມັນ; ແທ້ຈິງແລ້ວ, ຂ້າພະເຈົ້າຈະ ບອກທ່ານກ່ຽວກັບ ນະລົກອັນເປັນຕາຢ້ານທີ່ຄອຍຮັບ ຄາດຕະກອນຄືກັນກັບຕົວທ່ານເອງ ຊຶ່ງອ້າຍຂອງທ່ານໄດ້ຮັບ ຢູ່ໃນຂະນະນີ້, ຖ້າຫາກທ່ານບໍ່ກັບໃຈ ແລະ ລົ້ມເລີກຈຸດປະສົງ ອັນເປັນຄາດຕະກຳນັ້ນເສຍ, ແລະ ກັບຄືນໄປຫາແຜ່ນດິນຂອງ ທ່ານເອງພ້ອມດ້ວຍກອງທັບຂອງທ່ານ.

Alma 54

And now it came to pass in the commencement of the twenty and ninth year of the judges, that Ammoron sent unto Moroni desiring that he would exchange prisoners.

And it came to pass that Moroni felt to rejoice exceedingly at this request, for he desired the provisions which were imparted for the support of the Lamanite prisoners for the support of his own people; and he also desired his own people for the strengthening of his army.

Now the Lamanites had taken many women and children, and there was not a woman nor a child among all the prisoners of Moroni, or the prisoners whom Moroni had taken; therefore Moroni resolved upon a stratagem to obtain as many prisoners of the Nephites from the Lamanites as it were possible.

Therefore he wrote an epistle, and sent it by the servant of Ammoron, the same who had brought an epistle to Moroni. Now these are the words which he wrote unto Ammoron, saying:

Behold, Ammoron, I have written unto you somewhat concerning this war which ye have waged against my people, or rather which thy brother hath waged against them, and which ye are still determined to carry on after his death.

Behold, I would tell you somewhat concerning the justice of God, and the sword of his almighty wrath, which doth hang over you except ye repent and withdraw your armies into your own lands, or the land of your possessions, which is the land of Nephi.

Yea, I would tell you these things if ye were capable of hearkening unto them; yea, I would tell you concerning that awful hell that awaits to receive such murderers as thou and thy brother have been, except ye repent and withdraw your murderous purposes, and return with your armies to your own lands.

ᾳ ແຕ່ຖ້າຫາກທ່ານເຄີຍປະຕິເສດສິ່ງເຫລົ່ານີ້ມາກ່ອນແລ້ວ, ແລະ ເຄີຍໄດ້ຕໍ່ສູ້ກັບຜູ້ຄົນຂອງພຣະຜູ້ເປັນເຈົ້າມາກ່ອນແລ້ວ, ຂ້າພະເຈົ້າຮູ້ວ່າ ທ່ານກໍຈະເຮັດສິ່ງນີ້ອີກ.

But as ye have once rejected these things, and have fought against the people of the Lord, even so I may expect you will do it again.

ᾳ ແລະ ບັດນີ້ຈົ່ງເບິ່ງ, ພວກເຮົາໄດ້ຕຽມພ້ອມແລ້ວທີ່ຈະຮັບມືກັບທ່ານ; ແທ້ຈິງແລ້ວ, ຖ້າຫາກທ່ານບໍ່ລົ້ມເລີກຈຸດປະສົງຂອງທ່ານເສຍ, ຈົ່ງເບິ່ງ, ທ່ານຈະດึงເອົາພຣະພິโลດຂອງພຣະເຈົ້າລົງມາເທິງທ່ານ ຊຶ່ງເປັນອົງທີ່ທ່ານບໍ່ຍອມຮັບ, ຈົນວ່າທ່ານໄປສູ່ຄວາມພິນາດ.

And now behold, we are prepared to receive you; yea, and except you withdraw your purposes, behold, ye will pull down the wrath of that God whom you have rejected upon you, even to your utter destruction.

ᾳᾳ ແຕ່ວ່າ, ຕາບໃດທີ່ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່, ກອງທັບຂອງຂ້າພະເຈົ້າຈະຍົກມາຕີທ່ານ ຖ້າຫາກທ່ານບໍ່ຖອຍກັບໄປເສຍກ່ອນ, ແລະ ໃນບໍ່ຊ້ານີ້ ຄວາມຕາຍຈະມາຢ້ຽມຢາມທ່ານ ເພາະພວກເຮົາຈະຮັກສາເມືອງ ແລະ ແຜ່ນດິນຂອງພວກເຮົາ ໄວ້ໃຫ້ໝັ້ນຄົງ; ແທ້ຈິງແລ້ວ, ແລະ ພວກເຮົາຈະຮັກສາ ສາດສະໜາຂອງພວກເຮົາ ແລະ ອຸດົມການຂອງພຣະເຈົ້າຂອງ ພວກເຮົາຕໍ່ໄປ.

But, as the Lord liveth, our armies shall come upon you except ye withdraw, and ye shall soon be visited with death, for we will retain our cities and our lands; yea, and we will maintain our religion and the cause of our God.

ᾳᾳᾳ ແຕ່ຈົ່ງເບິ່ງ, ຂ້າພະເຈົ້າຄິດວ່າ ຂ້າພະເຈົ້າເວົ້າກັບທ່ານ ກ່ຽວກັບເລື່ອງເຫລົ່ານີ້ໂດຍບໍ່ມີປະໂຫຍດ; ເພາະທ່ານເປັນ ລູກ ຂອງນະລົກ; ສະນັ້ນ ຂ້າພະເຈົ້າຂໍຈົບສານຂອງຂ້າພະເຈົ້າໂດຍ ບອກທ່ານວ່າ ຂ້າພະເຈົ້າຈະບໍ່ແລກປ່ຽນຊະເລີຍເສີກ, ນອກຈາກໂດຍມີເງື່ອນໄຂว่า ท่านจะส่งมอบชายผู้หนึ่งพ้อม ທັງເມຍຂອງລາວ ແລະ ລູກຂອງລາວ ມາແລກກັບຊະເລີຍເສີກ ຜູ້ໜຶ່ງຂອງທ່ານ; ຖ້າຫາກທ່ານເຮັດໄດ້, ຂ້າພະເຈົ້າກໍຈະ ແລກປ່ຽນ.

But behold, it supposeth me that I talk to you concerning these things in vain; or it supposeth me that thou art a child of hell; therefore I will close my epistle by telling you that I will not exchange prisoners, save it be on conditions that ye will deliver up a man and his wife and his children, for one prisoner; if this be the case that ye will do it, I will exchange.

ᾳᾳᾳᾳ ແລະ ຈົ່ງເບິ່ງ, ຖ້າຫາກທ່ານບໍ່ເຮັດດັ່ງນັ້ນ, ຂ້າພະເຈົ້າຈະມາ ສູ້ຮົບກັບທ່ານ ພ້ອມດ້ວຍກອງທັບຂອງຂ້າພະເຈົ້າ; ແທ້ຈິງ ແລ້ວ, ຂ້າພະເຈົ້າຈະມອບອາວຸດໃຫ້ແກ່ພວກຜູ້ຍິງຂອງ ຂ້າພະເຈົ້າ ແລະ ເດັກນ້ອຍຂອງຂ້າພະເຈົ້າ, ແລະ ຂ້າພະເຈົ້າຈະ ມາສູ້ຮົບກັບທ່ານ ແລະ ຂ້າພະເຈົ້າຈະຕິດຕາມທ່ານໄປຈົນເຖິງ ແຜ່ນດິນຂອງທ່ານ, ຊຶ່ງເປັນແຜ່ນດິນມູນມໍລະດົກບ່ອນທຳອິດ ຂອງພວກເຮົາ; ແທ້ຈິງແລ້ວ, ມັນຈະເປັນເລືອດຕໍ່ເລືອດ, ແທ້ຈິງ ແລ້ວ, ຊີວິດຕໍ່ຊີວິດ; ແລະ ຂ້າພະເຈົ້າຈະສູ້ຮົບກັບທ່ານ ຈົນວ່າ ທ່ານຈະຖືກທຳລາຍໃຫ້ສິ້ນໄປຈາກຜືນແຜ່ນດິນໂລກ.

And behold, if ye do not this, I will come against you with my armies; yea, even I will arm my women and my children, and I will come against you, and I will follow you even into your own land, which is the land of our first inheritance; yea, and it shall be blood for blood, yea, life for life; and I will give you battle even until you are destroyed from off the face of the earth.

ᾳᾳᾳᾳᾳ ຈົ່ງເບິ່ງ, ຂ້າພະເຈົ້າກຳລັງຄຽດແຄ້ນຢູ່, ແລະ ຜູ້ຄົນຂອງ ຂ້າພະເຈົ້າກໍຄືກັນ; ທ່ານພະຍາຍາມຈະຂ້າພວກເຮົາ, ແຕ່ພວກ ເຮົາພຽງແຕ່ຕໍ່ຕ້ານເພື່ອປ້ອງກັນຕົວເທົ່ານັ້ນ. ແຕ່ຈົ່ງເບິ່ງ, ຖ້າ ຫາກທ່ານຍັງພະຍາຍາມທຳລາຍພວກເຮົາອີກ ພວກເຮົາກໍຈະ ພະຍາຍາມທຳລາຍທ່ານຄືກັນ; ແທ້ຈິງແລ້ວ, ພວກເຮົາຈະ ພະຍາຍາມເອົາແຜ່ນດິນຂອງພວກເຮົາຄືນມາ, ຊຶ່ງເປັນ ແຜ່ນດິນມູນມໍລະດົກບ່ອນທຳອິດຂອງພວກເຮົາ.

Behold, I am in my anger, and also my people; ye have sought to murder us, and we have only sought to defend ourselves. But behold, if ye seek to destroy us more we will seek to destroy you; yea, and we will seek our land, the land of our first inheritance.

ᾳᾳᾳᾳ ບັດນີ້ຂ້າພະເຈົ້າຂໍຈົບສານຂອງຂ້າພະເຈົ້າພຽງເທົ່ານີ້. ຂ້າພະເຈົ້າຄືโมโรไน; ຊຶ່ງເປັນຜູ້ນຳຂອງຊາວນີໄຟ.

Now I close my epistle. I am Moroni; I am a leader of the people of the Nephites.

໑໕ ບັດນີ້ ເຫດການໄດ້ບັງເກີດຂຶ້ນຄື ອາມໂມຣອນ, ເມື່ອລາວໄດ້
ຮັບສານສະບັບນີ້ແລ້ວ, ລາວກໍມີຄວາມຄຽດແຄ້ນຫລາຍ; ແລະ
ລາວໄດ້ຂຽນສານສະບັບໜຶ່ງຕອບໂມໂຣໄນ, ແລະ ນີ້ຄືຂໍ້ຄວາມ
ທີ່ລາວຂຽນ, ມີຄວາມວ່າ:
໑໖ ຂ້າພະເຈົ້າຄືອາມໂມຣອນ, ກະສັດຂອງຊາວເລມັນ;
ຂ້າພະເຈົ້າເປັນນ້ອງຊາຍຂອງອະມາລີໄກຢາ ຜູ້ທີ່ທ່ານ ລອບຂ້າ
ນັ້ນ. ຈົ່ງເບິ່ງ, ຂ້າພະເຈົ້າຈະແກ້ແຄ້ນແທນເພິ່ນ, ແທ້ຈິງແລ້ວ,
ແລະ ຂ້າພະເຈົ້າຈະຍົກທັບມາຕີທ່ານພ້ອມດ້ວຍກອງທັບຂອງ
ຂ້າພະເຈົ້າ ເພາະວ່າຂ້າພະເຈົ້າບໍ່ໄດ້ຢ້ານຄຳຂູ່ຂອງທ່ານເລີຍ.
໑໗ ເພາະຈົ່ງເບິ່ງ, ບັນພະບຸລຸດຂອງທ່ານເຮັດຜິດຕໍ່ພີ່ນ້ອງຂອງ
ພວກເຂົາ, ເຖິງຂະໜາດທີ່ພວກເຂົາໄດ້ລັກເອົາ ສິດທິໃນການ
ປົກຄອງຂອງພວກເຂົາໄປ ໃນເມື່ອສິດທິນັ້ນເປັນຂອງພວກເຂົາ
ແລ້ວໂດຍແທ້ຈິງ.
໑໘ ແລະ ບັດນີ້ຈົ່ງເບິ່ງ, ຖ້າຫາກທ່ານຈະຍອມວາງອາວຸດຂອງ
ທ່ານ, ແລະ ຍອມຕົວໃຫ້ຜູ້ທີ່ເປັນເຈົ້າຂອງສິດທິໂດຍແທ້ຈິງມາ
ປົກຄອງ, ເວລານັ້ນຂ້າພະເຈົ້າຈະໃຫ້ຜູ້ຄົນຂອງຂ້າພະເຈົ້າວາງ
ອາວຸດ ແລະ ຈະບໍ່ກໍ່ສົງຄາມອີກຕໍ່ໄປ.
໑໙ ຈົ່ງເບິ່ງ, ທ່ານເວົ້າຂູ່ຂ້າພະເຈົ້າ ແລະ ຜູ້ຄົນຂອງຂ້າພະເຈົ້າຕັ້ງ
ຫລາຍເທື່ອ; ແຕ່ຈົ່ງເບິ່ງ, ພວກເຮົາບໍ່ຢ້ານຄຳຂູ່ຂອງທ່ານເລີຍ.
໒໐ ເຖິງຢ່າງໃດກໍຕາມ, ຂ້າພະເຈົ້າຈະອະນຸຍາດໃຫ້ແລກປ່ຽນ
ຊະເລີຍເສິກກັນຕາມຄຳຂໍຮ້ອງຂອງທ່ານດ້ວຍຄວາມຍິນດີ ເພື່ອ
ຂ້າພະເຈົ້າຈະໄດ້ເກັບອາຫານຂອງຂ້າພະເຈົ້າໄວ້ສຳລັບພວກ
ທະຫານຂອງຂ້າພະເຈົ້າເອງ; ແລະ ພວກເຮົາຈະໄດ້ເຮັດເສິກ
ກັນຕໍ່ໄປ, ເພື່ອພວກເຮົາຈະໄດ້ເອົາຊາວນີໄຟມາຢູ່ໃຕ້ສິດອຳນາດ
ຂອງພວກເຮົາ ຫລື ເພື່ອການສູນສິ້ນນິລັນດອນຂອງພວກເຂົາ.
໒໑ ແລະ ຄືສິ່ງທີ່ກ່ຽວກັບພຣະເຈົ້າອົງນັ້ນ ຜູ້ຊຶ່ງທ່ານກ່າວວ່າ
ພວກເຮົາບໍ່ຍອມຮັບ, ຈົ່ງເບິ່ງ, ພວກເຮົາບໍ່ຮູ້ຈັກເລື່ອງນີ້ເລີຍ;
ທັງທ່ານເອງກໍບໍ່ຮູ້ຈັກຄືກັນ; ແຕ່ຖ້າຫາກຈະເປັນໄປວ່າສິ່ງນີ້ມີ
ຈິງ, ພວກເຮົາກໍບໍ່ຮູ້ຈັກ ເຖິງຢ່າງໃດກໍຕາມ ພຣະອົງໄດ້ສ້າງ
ພວກເຮົາຂຶ້ນມາຄືກັນກັບທ່ານ.
໒໒ ແລະ ຖ້າຫາກເປັນໄປວ່າມັນມີມານ ແລະ ນະລົກແທ້, ຈົ່ງເບິ່ງ
ພຣະອົງຈະບໍ່ສົ່ງທ່ານໄປບ່ອນນັ້ນບໍ ເພື່ອວ່າທ່ານຈະໄດ້ຢູ່ກັບ
ອ້າຍຂອງຂ້າພະເຈົ້າ ຜູ້ທີ່ທ່ານໄດ້ລອບຂ້າ, ຜູ້ທີ່ທ່ານເວົ້າວ່າ
ເພິ່ນໄດ້ໄປຫາບ່ອນນັ້ນ? ແຕ່ຈົ່ງເບິ່ງ, ເລື່ອງເຫລົ່ານີ້ບໍ່ສຳຄັນ
ເລີຍ.
໒໓ ຂ້າພະເຈົ້າຄືອາມໂມຣອນ, ແລະ ເປັນຜູ້ສືບເຊື້ອສາຍຂອງ
ໂຊຣຳ, ຜູ້ທີ່ຖືກບັນພະບຸລຸດຂອງທ່ານບີບບັງຄັບ ແລະ ພາໜີ
ມາຈາກເຢຣູຊາເລັມ.

Now it came to pass that Ammoron, when he had received this epistle, was angry; and he wrote another epistle unto Moroni, and these are the words which he wrote, saying:

I am Ammoron, the king of the Lamanites; I am the brother of Amalickiah whom ye have murdered. Behold, I will avenge his blood upon you, yea, and I will come upon you with my armies for I fear not your threatenings.

For behold, your fathers did wrong their brethren, insomuch that they did rob them of their right to the government when it rightly belonged unto them.

And now behold, if ye will lay down your arms, and subject yourselves to be governed by those to whom the government doth rightly belong, then will I cause that my people shall lay down their weapons and shall be at war no more.

Behold, ye have breathed out many threatenings against me and my people; but behold, we fear not your threatenings.

Nevertheless, I will grant to exchange prisoners according to your request, gladly, that I may preserve my food for my men of war; and we will wage a war which shall be eternal, either to the subjecting the Nephites to our authority or to their eternal extinction.

And as concerning that God whom ye say we have rejected, behold, we know not such a being; neither do ye; but if it so be that there is such a being, we know not but that he hath made us as well as you.

And if it so be that there is a devil and a hell, behold will he not send you there to dwell with my brother whom ye have murdered, whom ye have hinted that he hath gone to such a place? But behold these things matter not.

I am Ammoron, and a descendant of Zoram, whom your fathers pressed and brought out of Jerusalem.

ແລະ ຈົ່ງເບິ່ງບັດນີ້, ຂ້າພະເຈົ້າເປັນຊາວເລມັນຜູ້ອາດຫານ; ຈົ່ງເບິ່ງ, ສົງຄາມນີ້ມີຂຶ້ນກໍເພື່ອຈະໄດ້ແກ້ແຄ້ນຄວາມຜິດຂອງພວກເຂົາເຫລົ່ານັ້ນ, ແລະ ເພື່ອຈະໄດ້ຮັກສາສິດທິຂອງພວກເຂົາໃນການປົກຄອງ; ແລະ ຂ້າພະເຈົ້າຂໍຈົບສານຂອງຂ້າພະເຈົ້າຫາໂມໂຣໄນພຽງເທົ່ານີ້.

And behold now, I am a bold Lamanite; behold, this war hath been waged to avenge their wrongs, and to maintain and to obtain their rights to the government; and I close my epistle to Moroni.

ແອວມາ ๕๕

๑ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອໂມໂຣໄນຮັບສານສະບັບນີ້ແລ້ວ ເພີ່ນກໍໃຈຮ້າຍແຮງຍິ่ງຂຶ້ນ, ເພາະເພີ່ນຮູ້ວ່າອາມໂມຣອນມີຄວາມຮູ້ໂດຍສົມບູນເຖິງ ກົນອຸບາຍຂອງຕົນເອງ; ແທ້ຈິງແລ້ວ, ເພີ່ນຮູ້ວ່າເຫດຜົນທີ່ອາມໂມຣອນຈະເອົາມາເຮັດສົງຄາມກັບຊາວນີໄຟນັ້ນບໍ່ທ່ຽງທຳເລີຍ.

๒ ແລະ ເພີ່ນໄດ້ກ່າວວ່າ: ຈົ່ງເບິ່ງ, ຂ້າພະເຈົ້າຈະບໍ່ແລກປ່ຽນຊະເລີຍເສີກກັບອາມໂມຣອນ ນອກຈາກວ່າລາວຈະລົ້ມເລີກຈຸດປະສົງຂອງລາວຕາມສານຂອງຂ້າພະເຈົ້ານັ້ນ; ເພາະວ່າ ຂ້າພະເຈົ້າຈະບໍ່ໃຫ້ລາວມີອຳນາດຫລາຍໄປກວ່າທີ່ລາວມີຢູ່ໃນເວລານີ້.

๓ ຈົ່ງເບິ່ງ, ຂ້າພະເຈົ້າຮູ້ຈັກສະຖານທີ່ ທີ່ຊາວເລມັນກັກຂັງ ຜູ້ຄົນຂອງຂ້າພະເຈົ້າໄວ້ ຊຶ່ງພວກເຂົາຈັບເອົາໄປເປັນຊະເລີຍ; ແລະ ໂດຍທີ່ອາມໂມຣອນບໍ່ຍອມຮັບເງື່ອນໄຂຕາມສານຂອງຂ້າພະເຈົ້າແລ້ວ, ຈົ່ງເບິ່ງ, ຂ້າພະເຈົ້າຈະໃຫ້ລາວຕາມຄຳເວົ້າຂອງຂ້າພະເຈົ້າ; ຈົ່ງເບິ່ງ, ຂ້າພະເຈົ້າຈະຕາມຂ້າພວກເຂົາຈົນກວ່າພວກເຂົາຈະຕ້ອງຂໍສັນຕິພາບ.

๔ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອໂມໂຣໄນກ່າວຂໍ້ຄວາມນີ້ແລ້ວ, ເພີ່ນສັ່ງໃຫ້ມີການກວດຄົ້ນໃນບັນດາທະຫານຂອງເພີ່ນເພື່ອເພີ່ນຈະໄດ້ພົບຜູ້ໃດຜູ້ໜຶ່ງຊຶ່ງເປັນຜູ້ສືບເຊື້ອສາຍຂອງຊາວເລມັນຢູ່ໃນບັນດາພວກຕົນ.

๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ພົບ ຄົນໜຶ່ງຊື່ວ່າ ເລມັນ; ແລະ ລາວເປັນຂ້າໃຊ້ຂອງກະສັດ ຜູ້ຖືກອະມາລີໄຄ ຢາລອບຂ້ານັ້ນ.

๖ ບັດນີ້ໂມໂຣໄນສັ່ງໃຫ້ເລມັນ ແລະ ທະຫານຈຳນວນໜ້ອຍໜຶ່ງອອກໄປຫາທະຫານຍາມ ຊຶ່ງເຝົ້າຍາມຊາວນີໄຟຢູ່.

๗ ບັດນີ້ຊາວນີໄຟຖືກກັກຂັງໄວ້ຢູ່ໃນເມືອງກິດ; ສະນັ້ນ ໂມໂຣໄນຈຶ່ງໄດ້ແຕ່ງຕັ້ງເລມັນໃຫ້ເອົາທະຫານຈຳນວນໜ້ອຍໜຶ່ງໄປກັບລາວ.

๘ ແລະ ເມື່ອເຖິງຕອນຄ່ຳມາ ເລມັນໄດ້ໄປຫາທະຫານຍາມທີ່ເຝົ້າຍາມຊາວນີໄຟຢູ່, ແລະ ຈົ່ງເບິ່ງ, ພວກເຂົາເຫັນເລມັນເຂົ້າມາ ແລ້ວພວກທະຫານຍາມກໍຮ້ອງຂຶ້ນ; ແຕ່ລາວໄດ້ເວົ້າກັບພວກເຂົາວ່າ: ບໍ່ຕ້ອງຢ້ານ; ຈົ່ງເບິ່ງ, ຂ້ອຍກໍເປັນຊາວເລມັນ. ຈົ່ງເບິ່ງ, ພວກເຮົາໄດ້ໂຕນໜີມາຈາກຊາວນີໄຟໃນເວລາທີ່ພວກເຂົາກຳລັງນອນຫລັບຢູ່; ແລະ ຈົ່ງເບິ່ງ ພວກເຮົາໄດ້ລັກເອົາເຫລົ້າອະງ่ຸนຂອງພວກເຂົາມານຳອີກ.

Alma 55

Now it came to pass that when Moroni had received this epistle he was more angry, because he knew that Ammoron had a perfect knowledge of his fraud; yea, he knew that Ammoron knew that it was not a just cause that had caused him to wage a war against the people of Nephi.

And he said: Behold, I will not exchange prisoners with Ammoron save he will withdraw his purpose, as I have stated in my epistle; for I will not grant unto him that he shall have any more power than what he hath got.

Behold, I know the place where the Lamanites do guard my people whom they have taken prisoners; and as Ammoron would not grant unto me mine epistle, behold, I will give unto him according to my words; yea, I will seek death among them until they shall sue for peace.

And now it came to pass that when Moroni had said these words, he caused that a search should be made among his men, that perhaps he might find a man who was a descendant of Laman among them.

And it came to pass that they found one, whose name was Laman; and he was one of the servants of the king who was murdered by Amalickiah.

Now Moroni caused that Laman and a small number of his men should go forth unto the guards who were over the Nephites.

Now the Nephites were guarded in the city of Gid; therefore Moroni appointed Laman and caused that a small number of men should go with him.

And when it was evening Laman went to the guards who were over the Nephites, and behold, they saw him coming and they hailed him; but he saith unto them: Fear not; behold, I am a Lamanite. Behold, we have escaped from the Nephites, and they sleep; and behold we have taken of their wine and brought with us.

ດ ບັດນີ້ເວລາຊາວເລມັນໄດ້ຍິນຂໍ້ຄວາມນີ້ແລ້ວ ພວກເຂົາກໍ ຕ້ອນຮັບລາວດ້ວຍຄວາມປີຕິຍິນດີ; ແລະ ພວກເຂົາໄດ້ເວົ້າກັບ ລາວว่า: ເອົາເຫລົ້າອະງຸ່ນຂອງເຈົ້າມານີ້ ເພື່ອພວກເຮົາຈະໄດ້ ດື່ມ; ພວກເຮົາດີໃຈຫລາຍທີ່ເຈົ້າໄດ້ເຫລົ້າອະງຸ່ນມານຳ ເພາະว่า ພວກເຮົາມີຄວາມອິດເມື່ອຍຫລາຍ.

Now when the Lamanites heard these words they received him with joy; and they said unto him: Give us of your wine, that we may drink; we are glad that ye have thus taken wine with you for we are weary.

ດ ແລະ ເລມັນໄດ້ເວົ້າກັບພວກເຂົາว่า: ໃຫ້ພວກເຮົາເກັບເຫລົ້າ ອະງຸ່ນນີ້ໄວ້ກ່ອນຈົນກว่าພວກເຮົາຈະອອກໄປສູ້ຮົບກັບຊາວນີ ໄຟ. ແຕ່ຄຳເວົ້ານີ້ໄດ້ເຮັດໃຫ້ພວກເຂົາຢາກດື່ມເຫລົ້າອະງຸ່ນ ຫລາຍກว่าເກົ່າ;

But Laman said unto them: Let us keep of our wine till we go against the Nephites to battle. But this saying only made them more desirous to drink of the wine;

ດ ເພາະພວກເຂົາເວົ້າว่า: ພວກເຮົາມີຄວາມອິດເມື່ອຍຫລາຍ, ສະນັ້ນໃຫ້ພວກເຮົາດື່ມເຫລົ້າອະງຸ່ນຂອງເຈົ້າເສຍເຖີດ, ແລະ ອີກບໍ່ດົນພວກເຮົາຈະໄດ້ຮັບເຫລົ້າອະງຸ່ນທີ່ເປັນສ່ວນແບ່ງຂອງ ພວກເຮົາແລ້ວ, ຊຶ່ງມັນຈະເຮັດໃຫ້ພວກເຮົາມີກຳລັງເພີ່ມຂຶ້ນ ເພື່ອໄປຕໍ່ສູ້ກັບຊາວນີໄຟ.

For, said they: We are weary, therefore let us take of the wine, and by and by we shall receive wine for our rations, which will strengthen us to go against the Nephites.

ດ ແລະ ເລມັນຈຶ່ງເວົ້າກັບພວກເຂົາว่า: ຖ້າພວກເຈົ້າຢາກດື່ມກໍ ເຊີນຕາມສະບາຍ.

And Laman said unto them: You may do according to your desires.

ດ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ດື່ມເຫລົ້າ ອະງຸ່ນຢ່າງສະບາຍ; ແລະ ພວກເຂົາພໍໃຈໃນລົດຊາດຂອງມັນ, ສະນັ້ນ ພວກເຂົາຈຶ່ງດື່ມຕໍ່ໄປອີກຢ່າງລົ້ນເຄີງ; ແລະ ເຫລົ້ານັ້ນ ປຸກຫລາຍ, ເພາະໄດ້ເຮັດມັນໃຫ້ປຸກແບບນັ້ນ.

And it came to pass that they did take of the wine freely; and it was pleasant to their taste, therefore they took of it more freely; and it was strong, having been prepared in its strength.

ດ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ດື່ມ ແລະ ມ່ວນຊື່ນກັນ; ແລະ ບໍ່ດົນພວກເຂົາກໍມຶນເມົາໝົດ.

And it came to pass they did drink and were merry, and by and by they were all drunken.

ດ ບັດນີ້ເມື່ອເລມັນ ແລະ ຄົນຂອງລາວເຫັນว่าພວກນັ້ນ ເມົາເຫລົ້າໝົດ ແລະ ກຳລັງນອນຫລັບສະໜິດຢູ່, ພວກເຂົາຈຶ່ງ ໄດ້ກັບໄປຫາໂມໂຣໄນ ແລະ ເລົ່າເລື່ອງທັງໝົດທີ່ເກີດຂຶ້ນໃຫ້ ເພິ່ນຟັງ.

And now when Laman and his men saw that they were all drunken, and were in a deep sleep, they returned to Moroni and told him all the things that had happened.

ດ ແລະ ບັດນີ້ມັນໄດ້ເປັນໄປຕາມແຜນການຂອງໂມໂຣໄນ. ແລະ ໂມໂຣໄນຊຶ່ງໄດ້ຕຽມທະຫານຂອງເພິ່ນໄວ້ພ້ອມດ້ວຍອາວຸດ ແຫ່ງສົງຄາມຢູ່ແລ້ວ; ແລະ ເພິ່ນໄດ້ສົ່ງທະຫານໄປຫາເມືອງ ກິດຂະນະທີ່ຊາວເລມັນກຳລັງນອນຫລັບສະໜິດ ແລະ ມຶນເມົາ ຢູ່, ແລະ ເພິ່ນໄດ້ສົ່ງອາວຸດແຫ່ງສົງຄາມໄປໃຫ້ຊະເລີຍເສີກນຳ ອີກ, ເຖິງຂະໜາດທີ່ພວກເຂົາມີອາວຸດຄົບມື;

And now this was according to the design of Moroni. And Moroni had prepared his men with weapons of war; and he went to the city Gid, while the Lamanites were in a deep sleep and drunken, and cast in weapons of war unto the prisoners, insomuch that they were all armed;

ດ ແທ້ຈິງແລ້ວ, ແມ່ນແຕ່ໃຫ້ແກ່ພວກແມ່ຍິງຂອງພວກເຂົາ, ແລະ ເດັກນ້ອຍທັງໝົດຂອງພວກເຂົາ, ຕາມແຕ່ຄວາມສາມາດ ທີ່ຈະໃຊ້ອາວຸດໄດ້, ເມື່ອໂມໂຣໄນໄດ້ມອບອາວຸດໃຫ້ແກ່ຊະເລີຍ ເສີກທຸກຄົນ, ແລະ ທັງໝົດນີ້ເຮັດໄປໃນຄວາມງຽບທີ່ສຸດ.

Yea, even to their women, and all those of their children, as many as were able to use a weapon of war, when Moroni had armed all those prisoners; and all those things were done in a profound silence.

ດ ແຕ່ຖ້າຫາກພວກເຂົາເຮັດໃຫ້ພວກເລມັນຕື່ນຂຶ້ນມາ, ຈົ່ງ ເບິ່ງ ພວກເຂົາຍັງມຶນເມົາຢູ່ ແລະ ຊາວນີໄຟຕ້ອງໄດ້ຂ້າພວກ ເຂົາຖິ້ມ.

But had they awakened the Lamanites, behold they were drunken and the Nephites could have slain them.

๑๗ ແຕ່ຈົ່ງເບິ່ງ, ນີ້ບໍ່ແມ່ນຄວາມປາດຖະໜາຂອງໂມໂຣໄນເລີຍ; ເພິ່ນບໍ່ໄດ້ເບີກບານຢູ່ໃນການຂ້າຟັນ ຫລື ການນອງເລືອດ, ແຕ່ເພິ່ນເບີກບານຢູ່ໃນການຊ່ວຍເຫລືອຜູ້ຄົນຂອງເພິ່ນໃຫ້ພົ້ນຈາກຄວາມພິນາດ; ແລະ ດ້ວຍເຫດນີ້ ເພິ່ນຈະບໍ່ໄດ້ນຳຄວາມບໍ່ຍຸດຕິທຳມາຫາເພິ່ນເລີຍ, ເພິ່ນຈົ່ງບໍ່ຍອມໂຈມຕີຊາວເລມັນ ແລະ ທຳລາຍພວກເຂົາໃນຂະນະທີ່ພວກເຂົາກຳລັງມຶນເມົາຢູ່.

๘๐ ແຕ່ເພິ່ນໄດ້ຕາມຄວາມປະສົງຂອງເພິ່ນແລ້ວ; ເພາະວ່າເພິ່ນໄດ້ມອບອາວຸດໃຫ້ຊະເລີຍເສີກຊາວນີໄຟທຸກຄົນຢູ່ພາຍໃນກຳແພງເມືອງ ແລະ ໃຫ້ອຳນາດແກ່ພວກເຂົາທີ່ຈະໄດ້ຄວາມເປັນເຈົ້າຂອງພາກສ່ວນຕ່າງໆ ຊຶ່ງຢູ່ພາຍໃນກຳແພງເມືອງນັ້ນ.

๘๑ ແລະ ຫລັງຈາກນັ້ນ ເພິ່ນໄດ້ໃຫ້ທະຫານຂອງເພິ່ນຖອຍອອກໄປ, ແລະ ລ້ອມກອງທັບຂອງຊາວເລມັນໄວ້.

๘๘ ບັດນີ້ຈົ່ງເບິ່ງ ທຸກສິ່ງທຸກຢ່າງນີ້ໄດ້ເກີດຂຶ້ນໃນຕອນກາງຄືນ, ເວລາທີ່ຊາວເລມັນຕື່ນຂຶ້ນມາໃນຕອນເຊົ້າ ພວກເຂົາກໍໄດ້ເຫັນວ່າຕົນເອງກຳລັງຖືກຊາວນີໄຟອ້ອມໄວ້ຢູ່ຂ້າງນອກເມືອງ, ແລະ ເຫັນຊະເລີຍເສີກຂອງຕົນຖືອາວຸດຢູ່ຂ້າງໃນ.

๘๙ ແລະ ພວກເຂົາຈຶ່ງເຫັນວ່າ ຊາວນີໄຟມີກຳລັງຫລາຍກວ່າພວກເຂົາ; ແລະ ໃນສະພາບນີ້ ພວກເຂົາຮູ້ວ່າ ມັນບໍ່ສົມຄວນທີ່ຈະເຂົ້າຕໍ່ສູ້ກັບຊາວນີໄຟ; ສະນັ້ນ ຫົວໜ້າທະຫານຂອງພວກເຂົາຈຶ່ງໄດ້ສັ່ງເອົາອາວຸດແຫ່ງສົງຄາມຂອງພວກເຂົາ, ແລະ ພວກເຂົາໄດ້ນຳມັນອອກມາ ແລະ ໂຍນມັນລົງທີ່ຕີນຂອງຊາວນີໄຟ, ວິງວອນຂໍຄວາມເມດຕາສົງສານ.

๙๔ ບັດນີ້ຈົ່ງເບິ່ງ, ນີ້ເປັນຄວາມປາດຖະໜາຂອງໂມໂຣໄນ. ເພິ່ນຈຶ່ງໄດ້ເອົາພວກເຂົາໄວ້ເປັນຊະເລີຍເສີກ, ແລະ ຍຶດເອົາເມືອງນັ້ນ, ແລະ ໃຫ້ພວກເຂົາປ່ອຍຊະເລີຍທັງໝົດຊຶ່ງເປັນຊາວນີໄຟ; ແລະ ພວກເຂົາໄດ້ເຂົ້າຮ່ວມກັບກອງທັບຂອງໂມໂຣໄນ, ແລະ ເປັນກຳລັງສຳຄັນໃນກອງທັບຂອງເພິ່ນ.

๙๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນໄດ້ສັ່ງໃຫ້ຊາວເລມັນຊຶ່ງເພິ່ນຍຶດໄວ້ເປັນຊະເລີຍເລີ່ມເຮັດ ວຽກງານເພື່ອດັດແປງປ້ອມຍາມທົ່ວເມືອງກິດໃຫ້ມັນເຂັ້ມແຂງຂຶ້ນຕື່ມອີກ.

๙๖ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອເພິ່ນໄດ້ເສີມສ້າງເມືອງກິດຕາມຄວາມປາດຖະໜາຂອງເພິ່ນແລ້ວ, ເພິ່ນກໍໄດ້ສັ່ງໃຫ້ຜູ້ຄົນຂອງເພິ່ນນຳເອົາຊະເລີຍເສີກໄປຫາເມືອງອຸດົມສົມບູນ; ແລະ ເພິ່ນໄດ້ຄຸ້ມກັນເມືອງນັ້ນໄວ້ດ້ວຍກຳລັງທີ່ເຂັ້ມແຂງທີ່ສຸດ.

But behold, this was not the desire of Moroni; he did not delight in murder or bloodshed, but he delighted in the saving of his people from destruction; and for this cause he might not bring upon him injustice, he would not fall upon the Lamanites and destroy them in their drunkenness.

But he had obtained his desires; for he had armed those prisoners of the Nephites who were within the wall of the city, and had given them power to gain possession of those parts which were within the walls.

And then he caused the men who were with him to withdraw a pace from them, and surround the armies of the Lamanites.

Now behold this was done in the night-time, so that when the Lamanites awoke in the morning they beheld that they were surrounded by the Nephites without, and that their prisoners were armed within.

And thus they saw that the Nephites had power over them; and in these circumstances they found that it was not expedient that they should fight with the Nephites; therefore their chief captains demanded their weapons of war, and they brought them forth and cast them at the feet of the Nephites, pleading for mercy.

Now behold, this was the desire of Moroni. He took them prisoners of war, and took possession of the city, and caused that all the prisoners should be liberated, who were Nephites; and they did join the army of Moroni, and were a great strength to his army.

And it came to pass that he did cause the Lamanites, whom he had taken prisoners, that they should commence a labor in strengthening the fortifications round about the city Gid.

And it came to pass that when he had fortified the city Gid, according to his desires, he caused that his prisoners should be taken to the city Bountiful; and he also guarded that city with an exceedingly strong force.

ຄ໗ ແລະ ເຫດການໄດ້ບັງເກີດຂຶ້ນຄື ທັງໆທີ່ຊາວເລມັນມີກົນອຸບາຍຫລາຍຢ່າງ, ຊາວນີໄຟຍັງໄດ້ຮັກສາ ແລະ ປ້ອງກັນຊະເລີຍເສີກທັງໝົດທີ່ພວກເຂົາຈັບໄດ້, ແລະ ໄດ້ຮັກສາແຜ່ນດິນ ແລະ ສິ່ງນີ້ຊ່ວຍໃຫ້ໄດ້ປຽບທັງໝົດໃນການຍຶດເອົາເມືອງຕ່າງໆຂອງພວກເຂົາຄືນມາ.

And it came to pass that they did, notwithstanding all the intrigues of the Lamanites, keep and protect all the prisoners whom they had taken, and also maintain all the ground and the advantage which they had retaken.

ຄ໘ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວນີໄຟເລີ່ມໄດ້ຮັບໄຊຊະນະອີກ, ແລະ ກູ້ເອົາສິດ ແລະ ສິດທິພິເສດຂອງພວກເຂົາຄືນມາ.

And it came to pass that the Nephites began again to be victorious, and to reclaim their rights and their privileges.

ຄ໙ ແລະ ຫລາຍເທື່ອທີ່ຊາວເລມັນໄດ້ພະຍາຍາມທີ່ຈະເຂົ້າລ້ອມຊາວນີໄຟໃນຕອນກາງຄືນ, ແຕ່ໃນຄວາມພະຍາຍາມເຫລົ່ານັ້ນ ພວກເຂົາໄດ້ເສຍຊະເລີຍເສີກໄປຫລາຍຄົນ.

Many times did the Lamanites attempt to encircle them about by night, but in these attempts they did lose many prisoners.

ມ໐ ແລະ ຫລາຍເທື່ອທີ່ຊາວເລມັນໄດ້ພະຍາຍາມທີ່ຈະເກືອເຫລົ້າອະງ่ຸนຊາວນີໄຟ, ເພື່ອຈະໄດ້ທຳລາຍພວກເຂົາເຫລົ່ານັ້ນດ້ວຍຢາພິດ ຫລື ວ່າດ້ວຍຄວາມມຶນເມົາ.

And many times did they attempt to administer of their wine to the Nephites, that they might destroy them with poison or with drunkenness.

ມ໑ ແຕ່ຈົ່ງເບິ່ງ, ຊາວນີໄຟບໍ່ໄດ້ຊັກຊ້າທີ່ຈະ ລະນຶກເຖິງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາໃນເວລາທີ່ມີຄວາມທຸກເລີຍ. ພວກເຂົາຈະຖືກນຳໄປຖືກບ້ວງຂອງພວກເລມັນບໍ່ໄດ້; ແທ້ຈິງແລ້ວ, ພວກເຂົາຈະບໍ່ດື່ມເຫລົ້າອະງ่ຸนຂອງພວກສັດຕູ ເວັ້ນເສຍແຕ່ຈະໃຫ້ຊະເລີຍເສີກຊາວເລມັນບາງຄົນດື່ມເສຍກ່ອນ.

But behold, the Nephites were not slow to remember the Lord their God in this their time of affliction. They could not be taken in their snares; yea, they would not partake of their wine, save they had first given to some of the Lamanite prisoners.

ມ໒ ແລະ ພວກເຂົາລະມັດລະວັງຢູ່ສະເໝີ ເພື່ອບໍ່ໃຫ້ມີການຖືກວາງຢາພິດໃນບັນດາພວກເຂົາ; ເພາະຖ້າຫາກເຫລົ້າອະງ่ຸนເປັນພິດແກ່ຊາວເລມັນ ມັນກໍຈະເປັນພິດແກ່ຊາວນີໄຟຄືກັນ; ແລະ ຊາວນີໄຟໄດ້ລອງຊິມເຫລົ້າຂອງຊາວເລມັນແບບນີ້.

And they were thus cautious that no poison should be administered among them; for if their wine would poison a Lamanite it would also poison a Nephite; and thus they did try all their liquors.

ມ໓ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ມັນເປັນການສົມຄວນທີ່ໂມໂຣໄນຈະຕຽມພ້ອມເພື່ອເຂົ້າໂຈມຕີເມືອງໂມຣິອານທັນ; ເພາະຈົ່ງເບິ່ງ, ດ້ວຍຜົນງານຂອງພວກເຂົາ, ຊາວເລມັນຈົ່ງເສີມກຳລັງເມືອງໂມຣິອານທັນຈົນວ່າມັນເປັນທີ່ໝັ້ນອັນເຂັ້ມແຂງທີ່ສຸດ.

And now it came to pass that it was expedient for Moroni to make preparations to attack the city Morianton; for behold, the Lamanites had, by their labors, fortified the city Morianton until it had become an exceeding stronghold.

ມ໔ ແລະ ພວກເຂົາໄດ້ນຳເອົາກຳລັງໃໝ່ເຂົ້າມາໃນເມືອງ, ແລະ ສິ່ງສະບຽງອາຫານມາເພີ່ມອີກ.

And they were continually bringing new forces into that city, and also new supplies of provisions.

ມ໕ ແລະ ປີທີຊາວເກົ້າແຫ່ງການປົກຄອງຂອງຜູ້ຕັດສິນດູແລຜູ້ຄົນຂອງນີໄຟກໍໄດ້ສິ້ນສຸດລົງດັ່ງນີ້.

And thus ended the twenty and ninth year of the reign of the judges over the people of Nephi.

ແອວມາ ๕ผ

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນຕົ້ນປີທີສາມສິບແຫ່ງ ການປົກຄອງຂອງຜູ້ຕັດສິນ ໃນມື້ທີສອງຂອງເດືອນໜຶ່ງ, ໂມ ໂຣໄນໄດ້ຮັບສານຈາກຮີລາມັນກ່າວເຖິງການງານຂອງຜູ້ຄົນໃນ ແຂ່ນດິນສ່ວນນັ້ນ.

๒ ແລະ ນີ້ຄືຄຳເວົ້າທີ່ເພິ່ນໄດ້ຂຽນມາ, ມີຄວາມວ່າ: ໂມໂຣໄນ ອ້າຍນ້ອງທີ່ຮັກຂອງຂ້າພະເຈົ້າ, ທັງໃນພຣະຜູ້ເປັນເຈົ້າ ແລະ ທັງໃນຄວາມຍາກລຳບາກຈາກສົງຄາມຂອງພວກເຮົານີ້; ຈົ່ງ ເບິ່ງ, ອ້າຍນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າມີເລື່ອງ ຈະບອກໃຫ້ທ່ານຮູ້ຈັກກ່ຽວກັບສົງຄາມຂອງພວກເຮົາໃນ ແຂ່ນດິນພາກນີ້.

๓ ຈົ່ງເບິ່ງ, ຊາວໜຸ່ມ ສອງພັນຄົນເຫລົ່ານີ້ ຊຶ່ງອຳໂມນພາ ລົງມາຈາກແຂ່ນດິນນີໄຟ—ບັດນີ້ທ່ານຮູ້ຈັກແລ້ວວ່າ ພວກເຂົາ ເປັນຜູ້ສືບຕະກຸນຂອງເລມັນຜູ້ເປັນລູກຊາຍກົກຂອງລີໄຮ ບັນພະບຸລຸດຂອງພວກເຮົາ.

๔ ບັດນີ້ຂ້າພະເຈົ້າບໍ່ຈຳເປັນຕ້ອງທວນຄືນແກ່ທ່ານກ່ຽວກັບ ຮີດຄອງປະເພນີຂອງພວກເຂົາ ຫລື ຄວາມບໍ່ເຊື່ອຖືຂອງພວກ ເຂົາ, ເພາະທ່ານເອງກໍຮູ້ຈັກເລື່ອງທັງໝົດນີ້ຢູ່ແລ້ວ—

๕ ສະນັ້ນ ມັນເປັນການພຽງພໍແລ້ວທີ່ຂ້າພະເຈົ້າຈະບອກທ່ານ ວ່າ ຊາຍໜຸ່ມສອງພັນຄົນນີ້ໄດ້ຈັບອາວຸດແຫ່ງສົງຄາມ, ແລະ ໄດ້ຂໍໃຫ້ຂ້າພະເຈົ້າເປັນຜູ້ນຳຂອງພວກເຂົາ; ແລະ ພວກເຮົາໄດ້ ຍົກອອກໄປເພື່ອປ້ອງກັນປະເທດຊາດຂອງພວກເຮົາ.

๖ ແລະ ບັດນີ້ທ່ານກໍຮູ້ຈັກຢູ່ແລ້ວກ່ຽວກັບ ພັນທະສັນຍາຊຶ່ງ ບັນພະບຸລຸດຂອງພວກເຂົາໄດ້ເຮັດໄວ້ວ່າ ພວກເຂົາຈະບໍ່ຈັບ ອາວຸດແຫ່ງສົງຄາມເພື່ອຕໍ່ສູ້ກັບພີ່ນ້ອງຂອງພວກເຂົາ.

๗ ແຕ່ໃນປີທີຊາວຫົກ ເວລາພວກເຂົາໄດ້ເຫັນຄວາມທຸກ ແລະ ຄວາມຍາກລຳບາກທີ່ພວກເຮົາໄດ້ອົດທົນແທນພວກເຂົາ, ພວກເຂົາເກືອບຈະ ທຳລາຍພັນທະສັນຍາ ຊຶ່ງພວກເຂົາໄດ້ເຮັດ ໄວ້ ແລະ ວ່າຈະຈັບອາວຸດແຫ່ງສົງຄາມເພື່ອປ້ອງກັນພວກເຮົາ.

๘ ແຕ່ວ່າຂ້າພະເຈົ້າບໍ່ຍອມປ່ອຍໃຫ້ພວກເຂົາທຳລາຍພັນທະ ສັນຍາທີ່ພວກເຂົາໄດ້ເຮັດໄວ້, ຊຶ່ງຂ້າພະເຈົ້າຄິດວ່າພຣະເຈົ້າຈະ ເພີ່ມກຳລັງໃຫ້ພວກເຮົາ, ເຖິງຂະໜາດທີ່ພວກເຮົາບໍ່ຈຳເປັນ ຕ້ອງທົນທຸກອີກຕໍ່ໄປ ຖ້າຫາກພວກເຂົາເຮັດຕາມຄຳສາບານທີ່ ພວກເຂົາໄດ້ເຮັດໄວ້.

Alma 56

And now it came to pass in the commencement of the thirtieth year of the reign of the judges, on the second day in the first month, Moroni received an epistle from Helaman, stating the affairs of the people in that quarter of the land.

And these are the words which he wrote, saying: My dearly beloved brother, Moroni, as well in the Lord as in the tribulations of our warfare; behold, my beloved brother, I have somewhat to tell you concerning our warfare in this part of the land.

Behold, two thousand of the sons of those men whom Ammon brought down out of the land of Nephi—now ye have known that these were descendants of Laman, who was the eldest son of our father Lehi;

Now I need not rehearse unto you concerning their traditions or their unbelief, for thou knowest concerning all these things—

Therefore it sufficeth me that I tell you that two thousand of these young men have taken their weapons of war, and would that I should be their leader; and we have come forth to defend our country.

And now ye also know concerning the covenant which their fathers made, that they would not take up their weapons of war against their brethren to shed blood.

But in the twenty and sixth year, when they saw our afflictions and our tribulations for them, they were about to break the covenant which they had made and take up their weapons of war in our defence.

But I would not suffer them that they should break this covenant which they had made, supposing that God would strengthen us, insomuch that we should not suffer more because of the fulfilling the oath which they had taken.

໙ ແຕ່ຈົ່ງເບິ່ງ, ນີ້ເປັນເລື່ອງໜຶ່ງທີ່ພວກເຮົາຈະໄດ້ມີຄວາມ
ປິຕິຍິນດີຫລາຍທີ່ສຸດ. ເພາະຈົ່ງເບິ່ງ, ໃນປີທີຊາວຫົກ, ຂ້າພະ
ເຈົ້າຮີລາມັນໄດ້ເດີນທັບນຳໜ້າຊາຍໜຸ່ມສອງພັນຄົນໄປຫາ
ເມືອງຢູດາຍ, ເພື່ອຊ່ວຍເຫລືອອານທິພັດ, ຜູ້ຊຶ່ງໄດ້ຖືກແຕ່ງຕັ້ງ
ໃຫ້ເປັນຜູ້ດູແລຜູ້ຄົນໃນແຜ່ນດິນພາກນັ້ນ.

But behold, here is one thing in which we may have great joy. For behold, in the twenty and sixth year, I, Helaman, did march at the head of these two thousand young men to the city of Judea, to assist Antipus, whom ye had appointed a leader over the people of that part of the land.

໑໐ ແລະ ຂ້າພະເຈົ້າໄດ້ນຳເອົາລູກຊາຍສອງພັນຄົນຂອງ
ຂ້າພະເຈົ້າ, (ເພາະວ່າພວກເຂົາມີຄ່າຄວນທີ່ຈະຖືກເອີ້ນວ່າລູກ
ຊາຍ) ໄປຮ່ວມກັບກອງທັບຂອງອານທິພັດ, ຊຶ່ງດ້ວຍກຳລັງນີ້
ອານທິພັດມີຄວາມປິຕິຍິນດີຢ່າງຍິ່ງ; ເພາະຈົ່ງເບິ່ງ, ຊາວເລມັນ
ໄດ້ລົດກຳລັງທັບຂອງລາວລົງ ແລະ ທະຫານຂອງລາວຖືກຂ້າ
ຕາຍຢ່າງຫລວງຫລາຍ, ດ້ວຍເຫດນີ້ ພວກເຮົາຈຶ່ງເປັນທຸກ.

And I did join my two thousand sons, (for they are worthy to be called sons) to the army of Antipus, in which strength Antipus did rejoice exceedingly; for behold, his army had been reduced by the Lamanites because their forces had slain a vast number of our men, for which cause we have to mourn.

໑໑ ເຖິງຢ່າງໃດກໍຕາມ, ພວກເຮົາຍັງປອບໃຈຕົວເອງໃນເລື່ອງນີ້
ວ່າ ພວກເຂົາໄດ້ຕາຍໄປເພື່ອອຸດົມການຂອງປະເທດຊາດຂອງ
ຕົນ ແລະ ເພື່ອພຣະເຈົ້າຂອງພວກເຂົາ, ແທ້ຈິງແລ້ວ, ພວກເຂົາ
ເປັນສຸກແລ້ວ.

Nevertheless, we may console ourselves in this point, that they have died in the cause of their country and of their God, yea, and they are happy.

໑໒ ແລະ ຊາວເລມັນໄດ້ກັກຂັງຊະເລີຍເສິກຫລາຍຄົນໄວ້ອີກ, ຊຶ່ງ
ລ້ວນແຕ່ເປັນຫົວໜ້ານາຍທະຫານ, ເພາະບໍ່ມີຜູ້ໃດອື່ນເລີຍທີ່
ພວກນັ້ນຈະໄວ້ຊີວິດ. ແລະ ພວກເຮົາຄິດວ່າ ຂະນະນີ້ນາຍ
ທະຫານເຫລົ່ານີ້ອາດຈະຖືກກັກຂັງໄວ້ຢູ່ໃນແຜ່ນດິນນີໄຟ; ຖ້າ
ຫາກພວກເຂົາຍັງບໍ່ທັນຖືກຂ້າເທື່ອ.

And the Lamanites had also retained many prisoners, all of whom are chief captains, for none other have they spared alive. And we suppose that they are now at this time in the land of Nephi; it is so if they are not slain.

໑໓ ແລະ ບັດນີ້ ນີ້ແມ່ນເມືອງທີ່ຊາວເລມັນຍຶດເອົາໄປໂດຍການ
ເສຍເລືອດເນື້ອຂອງຜູ້ກ້າຫານຂອງພວກເຮົາຫລາຍຄົນ:

And now these are the cities of which the Lamanites have obtained possession by the shedding of the blood of so many of our valiant men:

໑໔ ແຜ່ນດິນແມນທາຍ, ຫລື ເມືອງແມນທາຍ, ແລະ ເມືອງຊີ
ເອສຣອມ, ແລະ ເມືອງຄູມະໄນ, ແລະ ເມືອງອານທິພາຣາ.

The land of Manti, or the city of Manti, and the city of Zeezrom, and the city of Cumeni, and the city of Antiparah.

໑໕ ແລະ ເມືອງເຫລົ່ານີ້ຖືກພວກເລມັນຍຶດເອົາໄປ ເວລາ
ຂ້າພະເຈົ້າໄປຮອດເມືອງຢູດາຍ; ແລະ ຂ້າພະເຈົ້າໄດ້ພົບກັບ
ອານທິພັດ ພ້ອມດ້ວຍທະຫານຂອງລາວທີ່ກຳລັງເຮັດວຽກຢູ່
ຢ່າງໜັກສຸດກຳລັງຢູ່ເພື່ອເສີມສ້າງເມືອງໃຫ້ແໜ້ນໜາຂຶ້ນ.

And these are the cities which they possessed when I arrived at the city of Judea; and I found Antipus and his men toiling with their might to fortify the city.

໑໖ ແທ້ຈິງແລ້ວ, ພວກເຂົາມີຄວາມອ່ອນເພຍຫລາຍທັງ
ຮ່າງກາຍ ແລະ ທາງວິນຍານ, ເພາະວ່າພວກເຂົາໄດ້ຕໍ່ສູ້ຢ່າງ
ອາດຫານໃນເວລາກາງເວັນ ແລະ ເຮັດວຽກໜັກໃນເວລາກາງ
ຄືນເພື່ອຮັກສາເມືອງຂອງພວກເຂົາໄວ້; ແລະ ພວກເຂົາຕ້ອງ
ທົນທຸກຢ່າງສາຫັດຕໍ່ທຸກຢ່າງ.

Yea, and they were depressed in body as well as in spirit, for they had fought valiantly by day and toiled by night to maintain their cities; and thus they had suffered great afflictions of every kind.

໑໗ ແລະ ບັດນີ້ພວກເຂົາຕັ້ງໃຈຈະເອົາຊະນະ ຫລື ຖືກຂ້າຢູ່ໃນ
ບ່ອນນີ້; ສະນັ້ນ ທ່ານຈະຄິດວ່າກຳລັງຂອງຄົນກຸ່ມນ້ອຍໆ ຊຶ່ງ
ຂ້າພະເຈົ້ານຳມານີ້, ແທ້ຈິງແລ້ວ, ພວກຊາຍໜຸ່ມຂອງ
ຂ້າພະເຈົ້າ ຈະໃຫ້ຄວາມຫວັງ ແລະ ຄວາມສຸກແກ່ພວກເຂົາ
ຫລາຍຂະໜາດໃດ.

And now they were determined to conquer in this place or die; therefore you may well suppose that this little force which I brought with me, yea, those sons of mine, gave them great hopes and much joy.

ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເວລາຊາວເລມັນເຫັນ ວ່າອານທິພັດໄດ້ຮັບກຳລັງເພີ່ມໃຫ້ກອງທັບຂອງລາວຫລາຍ ຂຶ້ນ, ອາມໂມຣອນຈຶ່ງສັ່ງກອງທັບຂອງລາວວ່າ ບໍ່ໃຫ້ພວກເຂົາ ມາໂຈມຕີເມືອງຢູດາຍ, ຫລື ຍົກມາສູ້ຮົບກັບພວກເຮົາ.

ແລະ ພວກເຮົາຈຶ່ງເປັນທີ່ໂປດປານຂອງພຣະຜູ້ເປັນເຈົ້າດັ່ງ ນີ້; ເພາະຖ້າຫາກພວກເຂົາຍົກມາໂຈມຕີພວກເຮົາໃນຂະນະທີ່ ພວກເຮົາຍັງອ່ອນແອຢູ່ນັ້ນ ພວກເຂົາອາດຈະທຳລາຍກອງທັບ ນ້ອຍໆຂອງພວກເຮົາໄດ້; ແຕ່ວ່າພວກເຮົາໄດ້ຖືກປົກປັກຮັກສາ ໄວ້ດັ່ງນີ້.

ອາມໂມຣອນໄດ້ສັ່ງໃຫ້ຜູ້ຄົນຂອງລາວຮັກສາເມືອງເຫລົ່ານັ້ນ ຊຶ່ງພວກເຂົາໄດ້ຍຶດເອົາມາໄດ້. ແລະ ປີທີຊາວຫົກໄດ້ສິ້ນສຸດ ລົງດັ່ງນີ້. ແລະ ໃນຕົ້ນປີທີຊາວເຈັດ ພວກເຮົາໄດ້ຕຽມເມືອງ ແລະ ຕຽມຕົວທີ່ຈະສູ້ຮົບ.

ບັດນີ້ພວກເຮົາປາດຖະໜາຈະໃຫ້ຊາວເລມັນຍົກມາໂຈມຕີ ພວກເຮົາ; ເພາະພວກເຮົາບໍ່ປາດຖະໜາທີ່ຈະຍົກໄປໂຈມຕີ ພວກເຂົາໃນທີ່ໝັ້ນຂອງພວກເຂົາ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ຈັດວາງນັກສືບ ໄວ້ທົ່ວໄປເພື່ອຕິດຕາມການເຄື່ອນໄຫວຂອງຊາວເລມັນ, ວ່າ ພວກເຂົາຈະບໍ່ຍົກທັບຜ່ານພວກເຮົາໄປໃນເວລາກາງຄືນ ຫລື ໃນເວລາກາງເວັນ ເພື່ອໄປໂຈມຕີເມືອງອື່ນໆຂອງພວກເຮົາຢູ່ ທາງເໜືອ.

ເພາະພວກເຮົາຮູ້ຈັກວ່າເມືອງເຫລົ່ານັ້ນຍັງບໍ່ທັນມີກຳລັງ ພຽງພໍທີ່ຈະປະເຊີນໜ້າກັບສັດຕູເທື່ອ; ສະນັ້ນ ພວກເຮົາຈຶ່ງ ປາດຖະໜາທີ່ຈະເຂົ້າໂຈມຕີພວກເຂົາທາງຂ້າງຫລັງ ຖ້າຫາກ ພວກເຂົາຜ່ານພວກເຮົາໄປ, ແລະ ໂດຍວິທີນີ້ ພວກເຮົາກໍຈະໄດ້ ໂຈມຕີພວກເຂົາທາງຂ້າງຫລັງ ແລະ ໃນຂະນະດຽວກັນ ພວກ ເຂົາຈະຖືກໂຈມຕີທາງດ້ານໜ້າ. ພວກເຮົາຄິດວ່າ ພວກເຮົາຈະ ເອົາຊະນະສັດຕູໄດ້; ແຕ່ຈົ່ງເບິ່ງ, ພວກເຮົາຕ້ອງຜິດຫວັງໃນ ຄວາມຕັ້ງໃຈເທື່ອນີ້.

ພວກເຂົາບໍ່ກ້າຍົກກອງທັບທັງໝົດຂອງພວກເຂົາຜ່ານໄປ, ທັງບໍ່ກ້າຍົກກອງທັບບາງສ່ວນຜ່ານໄປ ເພາະຢ້ານວ່າຕົນເອງ ບໍ່ມີກຳລັງພຽງພໍ, ແລະ ຢ້ານວ່າຈະເສຍໄຊ.

ແລະ ພວກເຂົາກໍບໍ່ກ້າເດີນທັບລົງໄປຕີເມືອງເຊຣາເຮັມລາ; ທັງບໍ່ກ້າຂ້າມຫົວແມ່ນ້ຳຊີໂດນໄປຫາເມືອງນີໄຟຮາຄືກັນ.

ແລະ ດ້ວຍກຳລັງທັບຂອງພວກເຂົາ, ພວກເຂົາຈຶ່ງຕັ້ງໃຈທີ່ ຈະຮັກສາເມືອງຕ່າງໆທີ່ພວກເຂົາຍຶດໄດ້ດັ່ງນີ້.

ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນເດືອນທີສອງຂອງປີ ນີ້, ພວກເຮົາໄດ້ຮັບສະບຽງອາຫານຫລາຍຢ່າງຈາກພວກພໍ່ ຂອງຊາຍໜຸ່ມສອງພັນຄົນຂອງຂ້າພະເຈົ້າ.

And now it came to pass that when the Lamanites saw that Antipus had received a greater strength to his army, they were compelled by the orders of Ammoron to not come against the city of Judea, or against us, to battle.

And thus were we favored of the Lord; for had they come upon us in this our weakness they might have perhaps destroyed our little army; but thus were we preserved.

They were commanded by Ammoron to maintain those cities which they had taken. And thus ended the twenty and sixth year. And in the commencement of the twenty and seventh year we had prepared our city and ourselves for defence.

Now we were desirous that the Lamanites should come upon us; for we were not desirous to make an attack upon them in their strongholds.

And it came to pass that we kept spies out round about, to watch the movements of the Lamanites, that they might not pass us by night nor by day to make an attack upon our other cities which were on the northward.

For we knew in those cities they were not sufficiently strong to meet them; therefore we were desirous, if they should pass by us, to fall upon them in their rear, and thus bring them up in the rear at the same time they were met in the front. We supposed that we could overpower them; but behold, we were disappointed in this our desire.

They durst not pass by us with their whole army, neither durst they with a part, lest they should not be sufficiently strong and they should fall.

Neither durst they march down against the city of Zarahemla; neither durst they cross the head of Sidon, over to the city of Nephihah.

And thus, with their forces, they were determined to maintain those cities which they had taken.

And now it came to pass in the second month of this year, there was brought unto us many provisions from the fathers of those my two thousand sons.

ຄ૭ ແລະ ມີຄົນອີກສອງພັນຄົນທີ່ຖືກສົ່ງມາໃຫ້ພວກເຮົາຈາກ ແຜ່ນດິນເຊຣາເຮັມລາ. ແລະ ພວກເຮົາຈຶ່ງມີຄົນພ້ອມແລ້ວຢູ່ ສະເໝີໜຶ່ງໝື່ນຄົນ, ແລະ ມີທັງສະບຽງອາຫານສຳລັບພວກ ເຂົາ, ແລະ ສຳລັບເມຍຂອງພວກເຂົາ ແລະ ລູກຂອງພວກເຂົາ.

ຄ૭ ແລະ ຊາວເລມັນຈຶ່ງເຫັນວ່າກຳລັງຂອງພວກເຮົານັບມື້ນັບ ເຂັ້ມແຂງຂຶ້ນເລື້ອຍໆດັ່ງນີ້ ແລະ ສະບຽງອາຫານກໍຖືກສົ່ງມາ ຄ້ຳຊູພວກເຮົາ, ພວກເຂົາກໍເລີ່ມມີຄວາມຢ້ານກົວຫລາຍຂຶ້ນ, ແລະ ໄດ້ຍົກທັບໄປທັນທີ ເພື່ອຈະໄດ້ຢັບຢັ້ງບໍ່ໃຫ້ພວກເຮົາໄດ້ ຮັບສະບຽງອາຫານ ແລະ ກຳລັງເພີ່ມເຕີມ.

ມ૦ ບັດນີ້ເວລາພວກເຮົາເຫັນວ່າຊາວເລມັນເລີ່ມກະວົນກະວາຍ ກ່ຽວກັບເລື່ອງນີ້, ພວກເຮົາຈຶ່ງຄິດຈະໃຊ້ກົນອຸບາຍກັບພວກ ເຂົາ; ສະນັ້ນ ອານທິພັດຈຶ່ງສັ່ງໃຫ້ຂ້າພະເຈົ້າເດີນທັບໄປພ້ອມ ດ້ວຍພວກລູກຊາຍໜຸ່ມຂອງຂ້າພະເຈົ້າ ເພື່ອໄປຫາເມືອງທີ່ຢູ່ ໃກ້ຄຽງໃຫ້ເຮັດຄືກັບວ່າ ພວກເຮົາກຳລັງຂົນສະບຽງອາຫານ ໄປຫາເມືອງທີ່ຢູ່ໃກ້ຄຽງນັ້ນ.

ມ૧ ແລະ ພວກເຮົາໄດ້ເດີນທັບໄປໃກ້ເມືອງອານທິພາຣາ, ຄ້າຍຄື ກັບວ່າຈະກາຍເມືອງນັ້ນໄປຫາອີກເມືອງໜຶ່ງທີ່ຢູ່ໃນຊາຍແດນ ໃກ້ແຄມທະເລ.

ມ૮ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ເດີນທັບໄປ ຄ້າຍຄືກັບວ່າ ພວກເຮົາຈະໄປຫາເມືອງນັ້ນພ້ອມດ້ວຍສະບຽງ ອາຫານຂອງພວກເຮົາ.

ມ૯ ແລະ ເຫດການໄດ້ບັງເກີດຂຶ້ນຄື ອານທິພັດໄດ້ເດີນທັບໄປ ພ້ອມດ້ວຍກອງທັບສ່ວນໜຶ່ງຂອງລາວ, ໂດຍໄດ້ປະສ່ວນທີ່ ເຫລືອໄວ້ເພື່ອຮັກສາຕົວເມືອງ. ແຕ່ວ່າລາວບໍ່ໄດ້ຍົກໄປຈົນກວ່າ ຂ້າພະເຈົ້າຈະຍົກໄປກ່ອນພ້ອມດ້ວຍກອງທັບນ້ອຍຂອງ ຂ້າພະເຈົ້າ ແລະ ມາຮອດໃກ້ເມືອງອານທິພາຣາ.

ມ૮ ແລະ ບັດນີ້, ຢູ່ໃນເມືອງອານທິພາຣານັ້ນມີກອງທັບທີ່ເຂັ້ມ ແຂງທີ່ສຸດຂອງຊາວເລມັນຕັ້ງຢູ່; ແທ້ຈິງແລ້ວ, ຢູ່ທີ່ນັ້ນມີກຳລັງ ພົນຫລາຍທີ່ສຸດ.

ມ૫ ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາພວກເລມັນໄດ້ຮັບ ແຈ້ງຄວາມຈາກນັກສືບ, ພວກເຂົາກໍໄດ້ຍົກທັບມາພ້ອມດ້ວຍ ກຳລັງທັບຂອງພວກເຂົາ ແລະ ເຂົ້າມາໂຈມຕີພວກເຮົາ.

ມ૬ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ໜີໄປທາງໜ້າ ພວກເຂົາໄປທາງເໜືອ. ແລະ ພວກເຮົາໄດ້ນຳເອົາກອງທັບທີ່ມີ ກຳລັງຫລາຍທີ່ສຸດຂອງຊາວເລມັນອອກໄປຈາກທີ່ໝັ້ນດັ່ງນີ້;

And also there were sent two thousand men unto us from the land of Zarahemla. And thus we were prepared with ten thousand men, and provisions for them, and also for their wives and their children.

And the Lamanites, thus seeing our forces increase daily, and provisions arrive for our support, they began to be fearful, and began to sally forth, if it were possible to put an end to our receiving provisions and strength.

Now when we saw that the Lamanites began to grow uneasy on this wise, we were desirous to bring a stratagem into effect upon them; therefore Antipus ordered that I should march forth with my little sons to a neighboring city, as if we were carrying provisions to a neighboring city.

And we were to march near the city of Antiparah, as if we were going to the city beyond, in the borders by the seashore.

And it came to pass that we did march forth, as if with our provisions, to go to that city.

And it came to pass that Antipus did march forth with a part of his army, leaving the remainder to maintain the city. But he did not march forth until I had gone forth with my little army, and came near the city Antiparah.

And now, in the city Antiparah were stationed the strongest army of the Lamanites; yea, the most numerous.

And it came to pass that when they had been informed by their spies, they came forth with their army and marched against us.

And it came to pass that we did flee before them, northward. And thus we did lead away the most powerful army of the Lamanites;

ນ້ກ ແທ້ຈິງແລ້ວ, ແມ່ນໄລຍະໄກບໍ່ໜ້ອຍ, ເຖິງຂະໜາດທີ່ເມື່ອ ພວກເຂົາເຫັນກອງທັບຂອງອານທິພັດຕິດຕາມມາດ້ວຍສຸດ ກຳລັງ, ພວກເຂົາບໍ່ໄດ້ຫັນຂວາ ຫລື ຊ້າຍ, ແຕ່ໄດ້ຍົກທັບ ຕິດຕາມພວກເຮົາມາໃນເສັ້ນທາງຊື່; ແລະ ດັ່ງທີ່ພວກເຂົາຄິດ ໄວ້, ມັນເປັນເຈດຕະນາຂອງພວກເຂົາທີ່ຈະຂ້າພວກເຮົາເສຍ ກ່ອນທີ່ອານທິພັດຈະຍົກທັບມາທັນພວກເຂົາ, ແລະ ນີ້ກໍເພື່ອ ວ່າພວກເຂົາຈະບໍ່ໄດ້ຖືກທະຫານຂອງພວກເຮົາລ້ອມໄວ້.

ນ້ຖ ແລະ ບັດນີ້ເວລາອານທິພັດເຫັນວ່າພວກເຮົາມີອັນຕະລາຍ, ຈົ່ງຟ້າວເດີນທັບຂອງລາວມາຢ່າງວ່ອງໄວ. ແຕ່ຈົ່ງເບິ່ງ, ມັນ ເປັນເວລາກາງຄືນ; ສະນັ້ນ ພວກເຂົາຈົ່ງບໍ່ສາມາດຕິດຕາມ ພວກເຮົາມາທັນ, ທັງອານທິພັດກໍຕິດຕາມພວກເຂົາບໍ່ທັນຄື ກັນ; ສະນັ້ນ ພວກເຮົາຈົ່ງໄດ້ຕັ້ງຄ້າຍພັກຂຶ້ນໃນຄືນນັ້ນ.

ນ້ດ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນຕອນເຊົ້າມືດຂອງມື້ນັ້ນ, ຈົ່ງເບິ່ງ, ຊາວເລມັນໄດ້ອອກໄລ່ຕາມພວກເຮົາມາອີກແລ້ວ. ບັດ ນີ້ພວກເຮົາບໍ່ມີກຳລັງພຽງພໍທີ່ຈະຕໍ່ສູ້ກັບພວກເຂົາ; ແທ້ຈິງ ແລ້ວ, ຂ້າພະເຈົ້າທົນບໍ່ໄດ້ທີ່ຈະໃຫ້ລູກຊາຍໜຸ່ມທັງຫລາຍຂອງ ຂ້າພະເຈົ້າຕ້ອງຕົກຢູ່ໃນກຳມືຂອງພວກເຂົາ; ສະນັ້ນ ພວກເຮົາ ຈົ່ງໄດ້ເດີນທັບຕໍ່ໄປ, ແລະ ພວກເຮົາໄດ້ເດີນທັບເຂົ້າໄປໃນຖິ່ນ ແຫ້ງແລ້ງກັນດານ.

ຄ0 ບັດນີ້ພວກເຂົາບໍ່ກ້າຫັນຂວາ ຫລື ຊ້າຍ ເພາະພວກເຂົາຢ້ານ ວ່າພວກເຂົາຈະຖືກອ້ອມໄວ້; ທັງຂ້າພະເຈົ້າເອງກໍບໍ່ກ້າຫັນຂວາ ຫລື ຊ້າຍ ເພາະຢ້ານວ່າພວກເຂົາຈະຕາມມາທັນ, ແລະ ພວກ ເຮົາຈະຕ້ານທານພວກເຂົາບໍ່ໄດ້, ແຕ່ຈະຖືກຂ້າ, ແລ້ວພວກເຂົາ ກໍຈະໜີໄປໄດ້; ແລະ ດ້ວຍເຫດນີ້ ພວກເຮົາຈົ່ງໄດ້ປົບໜີໄປ ເລື້ອຍໆໃນຖິ່ນແຫ້ງແລ້ງກັນດານໝົດມື້ນັ້ນຈົນຮອດຕອນຄ່ຳ ມືດ.

ຄ1 ແລະ ເຫດການໄດ້ບັງເກີດຂຶ້ນອີກຄື, ຕອນເຊົ້າມື້ໃໝ່ມາ ພວກເຮົາກໍເຫັນຊາວເລມັນຕິດຕາມມາອີກ, ແລະ ພວກເຮົາກໍ ໄດ້ໜີໄປທາງໜ້າພວກເຂົາຕໍ່ໄປ.

ຄ6 ແຕ່ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຢຸດໄລ່ ຫລັງຈາກ ຕາມມາບໍ່ໄກເທົ່າໃດ; ແລະ ມັນເປັນຕອນເຊົ້າຂອງວັນທີສາມ ຂອງເດືອນເຈັດ.

ຄນ ແລະ ບັດນີ້, ພວກເຮົາບໍ່ຮູ້ວ່າອານທິພັດໄດ້ໄລ່ຕາມພວກນັ້ນ ມາທັນຫລືບໍ່, ແຕ່ຂ້າພະເຈົ້າໄດ້ເວົ້າກັບຄົນຂອງຂ້າພະເຈົ້າວ່າ: ຈົ່ງເບິ່ງ, ພວກເຮົາບໍ່ຮູ້ວ່າເປັນຫຍັງສັດຕູຈົ່ງຢຸດໄລ່ຕາມພວກ ເຮົາ ມັນອາດຈະເປັນຈຸດປະສົງຂອງພວກເຂົາທີ່ຈະໃຫ້ພວກ ເຮົາເຂົ້າໂຈມຕີ, ເພື່ອວ່າພວກເຮົາຈະຖືກບ້ວງຂອງພວກເຂົາ;

ຄຄ ສະນັ້ນ ພວກເຈົ້າຈະວ່າແນວໃດ, ລູກຂອງພໍ່, ພວກເຈົ້າຈະ ອອກໄປສູ້ຮົບກັບພວກເຂົາບໍ?

Yea, even to a considerable distance, insomuch that when they saw the army of Antipus pursuing them, with their might, they did not turn to the right nor to the left, but pursued their march in a straight course after us; and, as we suppose, it was their intent to slay us before Antipus should overtake them, and this that they might not be surrounded by our people.

And now Antipus, beholding our danger, did speed the march of his army. But behold, it was night; therefore they did not overtake us, neither did Antipus overtake them; therefore we did camp for the night.

And it came to pass that before the dawn of the morning, behold, the Lamanites were pursuing us. Now we were not sufficiently strong to contend with them; yea, I would not suffer that my little sons should fall into their hands; therefore we did continue our march, and we took our march into the wilderness.

Now they durst not turn to the right nor to the left lest they should be surrounded; neither would I turn to the right nor to the left lest they should overtake me, and we could not stand against them, but be slain, and they would make their escape; and thus we did flee all that day into the wilderness, even until it was dark.

And it came to pass that again, when the light of the morning came we saw the Lamanites upon us, and we did flee before them.

But it came to pass that they did not pursue us far before they halted; and it was in the morning of the third day of the seventh month.

And now, whether they were overtaken by Antipus we knew not, but I said unto my men: Behold, we know not but they have halted for the purpose that we should come against them, that they might catch us in their snare;

Therefore what say ye, my sons, will ye go against them to battle?

ແລະ ບັດນີ້ຂ້າພະເຈົ້າເວົ້າກັບທ່ານ, ອ້າຍນ້ອງໂມໂຣໄນທີ່ຮັກແພງຂອງຂ້າພະເຈົ້າ, ວ່າຂ້າພະເຈົ້າບໍ່ເຄີຍເຫັນ ຄວາມກ້າຫານແບບນີ້ມາກ່ອນເລີຍ, ບໍ່ເຄີຍເລີຍ, ບໍ່ເຄີຍເຫັນຜູ້ໃດເລີຍແມ່ນແຕ່ໃນບັນດາຊາວນີໄຟທັງໝົດ.

And now I say unto you, my beloved brother Moroni, that never had I seen so great courage, nay, not amongst all the Nephites.

ເພາະຂ້າພະເຈົ້າຈົນເຖິງຂັ້ນເອີ້ນພວກເຂົາວ່າລູກຊາຍ (ເພາະວ່າພວກເຂົາທຸກຄົນຍັງໜຸ່ມນ້ອຍຫລາຍ) ຈົນວ່າພວກເຂົາເອີ້ນຂ້າພະເຈົ້າວ່າ: ພໍ່ເອີຍ, ຈົ່ງເບິ່ງ ພຣະເຈົ້າສະຖິດຢູ່ກັບພວກເຮົາ, ແລະ ພຣະອົງຈະບໍ່ຍອມໃຫ້ພວກເຮົາຖືກຂ້າຕອກ; ຂໍໃຫ້ພວກເຮົາອອກໄປເທາະ; ພວກເຮົາຈະບໍ່ຂ້າພີ່ນ້ອງຊາວເລມັນຂອງພວກເຮົາ ຖ້າຫາກພວກເຂົາຈະປ່ອຍພວກເຮົາໃຫ້ຢູ່ຕາມລຳພັງ; ສະນັ້ນ ຂໍໃຫ້ພວກເຮົາອອກໄປເທາະ ຢ້ານວ່າພວກສັດຕູຈະເອົາຊະນະກອງທັບຂອງອານທິພັດ.

For as I had ever called them my sons (for they were all of them very young) even so they said unto me: Father, behold our God is with us, and he will not suffer that we should fall; then let us go forth; we would not slay our brethren if they would let us alone; therefore let us go, lest they should overpower the army of Antipus.

ບັດນີ້ພວກເຂົາບໍ່ເຄີຍຕໍ່ສູ້ມາກ່ອນ, ແຕ່ພວກເຂົາບໍ່ຢ້ານຄວາມຕາຍເລີຍ; ແລະ ພວກເຂົາໄດ້ຄິດເຖິງ ເສລີພາບຂອງພໍ່ຂອງພວກເຂົາຫລາຍກວ່າຊີວິດຂອງຕົນເອງ; ແທ້ຈິງແລ້ວ, ພວກເຂົາໄດ້ຮັບການສິດສອນຈາກ ແມ່ຂອງພວກເຂົາ, ວ່າຖ້າຫາກພວກເຂົາບໍ່ສົງໄສ, ແລ້ວພຣະເຈົ້າຈະປົດປ່ອຍພວກເຂົາ.

Now they never had fought, yet they did not fear death; and they did think more upon the liberty of their fathers than they did upon their lives; yea, they had been taught by their mothers, that if they did not doubt, God would deliver them.

ແລະ ພວກເຂົາໄດ້ທົບທວນຄຳເວົ້າຂອງແມ່ຂອງພວກເຂົາ ກັບຂ້າພະເຈົ້າ, ໂດຍກ່າວວ່າ: ພວກເຮົາບໍ່ສົງໄສເລີຍວ່າ ແມ່ຂອງພວກເຮົາຮູ້ຈັກເລື່ອງນີ້.

And they rehearsed unto me the words of their mothers, saying: We do not doubt our mothers knew it.

ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້າພ້ອມດ້ວຍທະຫານສອງພັນຄົນໄດ້ຫັນກັບໄປຕໍ່ສູ້ກັບຊາວເລມັນທີ່ໄດ້ໄລ່ຕາມພວກເຮົາມາ. ແລະ ບັດນີ້ຈົ່ງເບິ່ງ, ກອງທັບຂອງອານທິພັດໄດ້ຍົກມາທັນ ແລະ ການສູ້ຮົບອັນດຸເດືອດກໍເລີ່ມຕົ້ນ.

And it came to pass that I did return with my two thousand against these Lamanites who had pursued us. And now behold, the armies of Antipus had overtaken them, and a terrible battle had commenced.

ໂດຍທີ່ກອງທັບຂອງອານທິພັດຍັງມີຄວາມອ່ອນເພຍຫລາຍຢູ່ຍ້ອນການເດີນທັບມາໄກພາຍໃນໄລຍະເວລາອັນສັ້ນໆ ແບບນີ້, ພວກເຂົາຈົ່ງເກືອບຕົກຢູ່ໃນກຳມືຂອງຊາວເລມັນ; ແລະ ຖ້າຫາກຂ້າພະເຈົ້າບໍ່ກັບຄືນມາພ້ອມດ້ວຍສອງພັນຄົນນີ້ແລ້ວ ພວກເຂົາຄົງຈະໄດ້ບັນລຸຕາມຈຸດປະສົງຂອງພວກເຂົາໄປແລ້ວ.

The army of Antipus being weary, because of their long march in so short a space of time, were about to fall into the hands of the Lamanites; and had I not returned with my two thousand they would have obtained their purpose.

ເພາະອານທິພັດ ແລະ ຜູ້ນຳທະຫານຫລາຍຄົນໄດ້ຖືກຂ້າຕາຍດ້ວຍດາບ ຍ້ອນວ່າຄວາມອິດເມື່ອຍຂອງພວກເຂົາ ຊຶ່ງເກີດມາຈາກການເດີນທັບຢ່າງວ່ອງໄວ—ສະນັ້ນ ທະຫານຂອງອານທິພັດຈົ່ງມີຄວາມສັບສົນຍ້ອນການຕາຍຂອງພວກຜູ້ນຳຂອງພວກເຂົາ, ແລ້ວພວກເຂົາກໍເລີ່ມແຕກໜີໄປຈາກຊາວເລມັນ.

For Antipus had fallen by the sword, and many of his leaders, because of their weariness, which was occasioned by the speed of their march—therefore the men of Antipus, being confused because of the fall of their leaders, began to give way before the Lamanites.

๕๘ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນຈຶ່ງມີກຳລັງໃຈ ຂຶ້ນ, ແລະ ເລີ່ມໄລ່ຕາມພວກເຂົາໄປ; ແລະ ຊາວເລມັນໄດ້ໄລ່ ພວກເຂົາໄປຢ່າງເອົາຈິງເອົາຈັງ ເມື່ອຮີລາມັນພ້ອມດ້ວຍສອງ ພັນຄົນຂອງເພີ່ນເຂົ້າຕີທາງດ້ານຫລັງ, ແລະ ເລີ່ມຂ້າພວກເຂົາ ລົງຢ່າງຫລວງຫລາຍ, ເຖິງຂະໜາດທີ່ກອງທັບຂອງຊາວເລ ມັນທັງໝົດຕ້ອງຢຸດ ແລະ ຫັນກັບມາສູ້ກັບຮີລາມັນ.

๕๙ ບັດນີ້ເວລາຄົນຂອງອານທິພັດເຫັນວ່າຊາວເລມັນຫວນກັບ ຄືນໄປ, ພວກເຂົາຈຶ່ງໄດ້ເຕົ້າໂຮມກັນເຂົ້າ ແລະ ເຂົ້າໄປໂຈມຕີ ທາງດ້ານຫລັງຂອງຊາວເລມັນອີກ.

๕๔ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄືພວກເຮົາ, ຜູ້ຄົນຂອງນີ ໄຟ, ທະຫານຂອງອານທິພັດ, ແລະ ຂ້າພະເຈົ້າພ້ອມດ້ວຍສອງ ພັນຄົນຂອງຂ້າພະເຈົ້າໄດ້ລ້ອມຊາວເລມັນໄວ້ ແລະ ໄດ້ຂ້າພວກ ເຂົາ; ແທ້ຈິງແລ້ວ, ເຖິງຂະໜາດທີ່ພວກເຂົາຖືກບັງຄັບໃຫ້ ມອບອາວຸດແຫ່ງສົງຄາມ ແລະ ມອບຕົວໃຫ້ເປັນຊະເລີຍເສີກ.

๕๕ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເວລາພວກເຂົາຍອມ ມອບຕົວໃຫ້ກັບພວກເຮົາແລ້ວ, ຈົ່ງເບິ່ງ, ຂ້າພະເຈົ້າຈຶ່ງໄດ້ນັບ ຈຳນວນຊາຍໜຸ່ມທັງໝົດທີ່ໄດ້ຕໍ່ສູ້ຮ່ວມກັບຂ້າພະເຈົ້າ, ຢ້ານວ່າ ຈະມີຫລາຍຄົນຖືກຂ້າຕາຍ.

๕๖ ແຕ່ຈົ່ງເບິ່ງ, ຂ້າພະເຈົ້າມີຄວາມປີຕິຍິນດີຫລາຍທີ່ສຸດ ເພາະວ່າ ບໍ່ມີຈັກຄົນເລີຍທີ່ລົ້ມຕາຍກັບພື້ນດິນ; ແທ້ຈິງແລ້ວ, ພວກເຂົາໄດ້ຕໍ່ສູ້ຄືກັນກັບວ່າພວກເຂົາຕໍ່ສູ້ດ້ວຍພະລັງຂອງ ພຣະເຈົ້າ; ແທ້ຈິງແລ້ວ, ບໍ່ເຄີຍມີຜູ້ໃດເຄີຍເຫັນການຕໍ່ສູ້ດ້ວຍ ພະລັງອັນໜ້າອັດສະຈັນໃຈແບບນີ້ມາກ່ອນເລີຍ; ແລະ ດ້ວຍ ພະລັງອັນຍິ່ງໃຫຍ່ນີ້ ພວກເຂົາຈຶ່ງໄດ້ໂຈມຕີຊາວເລມັນ, ຈົນເຮັດ ໃຫ້ພວກເຂົາມີຄວາມຢ້ານກົວຫລາຍ; ແລະ ດ້ວຍເຫດນີ້ຊາວເລ ມັນຈຶ່ງໄດ້ຍອມມອບຕົວເປັນຊະເລີຍເສີກ.

๕๗ ແລະ ເມື່ອງຈາກວ່າພວກເຮົາບໍ່ມີບ່ອນສຳລັບໄວ້ຊະເລີຍເສີກ, ທີ່ຈະໃຫ້ພວກເຮົາຮັກສາພວກເຂົາໃຫ້ພົ້ນຈາກກອງທັບຂອງ ຊາວເລມັນ, ສະນັ້ນ ພວກເຮົາຈຶ່ງໄດ້ຈັດສົ່ງພວກເຂົາໄປຫາ ແຜ່ນດິນເຊຣາເຮັມລາ, ຊຶ່ງມີທະຫານສ່ວນໜຶ່ງຂອງອານທິ ພັດຜູ້ທີ່ບໍ່ໄດ້ຖືກຂ້ານຳພາໄປ, ແລະ ສ່ວນທີ່ເຫລືອຢູ່ນັ້ນ ຂ້າພະເຈົ້າໄດ້ພາພວກເຂົາໄປຮ່ວມກັບຊາຍໜຸ່ມ ຊາວອຳໂມນ ຂອງຂ້າພະເຈົ້າ, ແລະ ເດີນທັບກັບຄືນໄປຫາເມືອງຢູດາຍ.

And it came to pass that the Lamanites took courage, and began to pursue them; and thus were the Lamanites pursuing them with great vigor when Helaman came upon their rear with his two thousand, and began to slay them exceedingly, insomuch that the whole army of the Lamanites halted and turned upon Helaman.

Now when the people of Antipus saw that the Lamanites had turned them about, they gathered together their men and came again upon the rear of the Lamanites.

And now it came to pass that we, the people of Nephi, the people of Antipus, and I with my two thousand, did surround the Lamanites, and did slay them; yea, insomuch that they were compelled to deliver up their weapons of war and also themselves as prisoners of war.

And now it came to pass that when they had surrendered themselves up unto us, behold, I numbered those young men who had fought with me, fearing lest there were many of them slain.

But behold, to my great joy, there had not one soul of them fallen to the earth; yea, and they had fought as if with the strength of God; yea, never were men known to have fought with such miraculous strength; and with such mighty power did they fall upon the Lamanites, that they did frighten them; and for this cause did the Lamanites deliver themselves up as prisoners of war.

And as we had no place for our prisoners, that we could guard them to keep them from the armies of the Lamanites, therefore we sent them to the land of Zarahemla, and a part of those men who were not slain of Antipus, with them; and the remainder I took and joined them to my stripling Ammonites, and took our march back to the city of Judea.

ແອວມາ ๕๗

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້າໄດ້ຮັບສານ
ສະບັບໜຶ່ງຈາກກະສັດອາມໂມຣອນ, ທີ່ມີຄວາມວ່າ ຖ້າຫາກ
ຂ້າພະເຈົ້າສົ່ງຊະເລີຍເສີກທີ່ພວກເຮົາຈັບໄດ້ຄືນໃຫ້ລາວ ແລ້ວ
ລາວຈະມອບເມືອງອານທິພາຣາໃຫ້ພວກເຮົາ.

๘ ແຕ່ຂ້າພະເຈົ້າໄດ້ສົ່ງສານຕອບກະສັດ, ວ່າພວກເຮົາແນ່ໃຈ
ວ່າ ກຳລັງຄົນຂອງພວກເຮົາມີພຽງພໍທີ່ຈະຕີເອົາເມືອງອານທິ
ພາຣາໄດ້ດ້ວຍກຳລັງຂອງພວກເຮົາ; ແລະ ການສົ່ງຊະເລີຍເພື່ອ
ແລກປ່ຽນກັບເມືອງນັ້ນ ພວກເຮົາຄິດວ່າມັນບໍ່ເປັນການ
ສະຫລາດເລີຍ, ແລະ ວ່າພວກເຮົາຈະສົ່ງຊະເລີຍເສີກຄືນເພື່ອ
ເປັນການແລກປ່ຽນກັບຊະເລີຍເສີກເທົ່ານັ້ນ.

๙ ແລະ ອາມໂມຣອນປະຕິເສດສານຂອງຂ້າພະເຈົ້າ, ເພາະວ່າ
ລາວບໍ່ຍອມແລກປ່ຽນຊະເລີຍເສີກ; ສະນັ້ນ ພວກເຮົາຈຶ່ງຕຽມ
ພ້ອມເພື່ອຈະໄປຕີເອົາເມືອງອານທິພາຣາ.

๑๐ ແຕ່ຜູ້ຄົນເມືອງອານທິພາຣາໄດ້ປະຖິ້ມເມືອງ ແລະ ອອກໜີ
ໄປຫາເມືອງຕ່າງໆ ຊຶ່ງພວກເຂົາເປັນເຈົ້າຂອງຢູ່, ເພື່ອເສີມ
ກຳລັງເມືອງເຫລົ່ານັ້ນ; ແລະ ດ້ວຍເຫດນີ້ ເມືອງອານທິພາຣາ
ຈຶ່ງຕົກຢູ່ໃນມືຂອງພວກເຮົາດັ່ງນີ້.

๑๑ ແລະ ປີທີຊາວແປດແຫ່ງການປົກຄອງຂອງຜູ້ຕັດສິນໄດ້
ສິ້ນສຸດລົງດັ່ງນີ້.

๑๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນຕົ້ນປີທີຊາວເກົ້າ ພວກ
ເຮົາໄດ້ສະບຽງອາຫານຊຸດໜຶ່ງ ແລະ ກຳລັງພົນມາເພີ່ມເຕີມ
ກອງທັບອີກ, ຊຶ່ງໄດ້ມາຈາກແຜ່ນດິນເຊຣາເຮັມລາ, ແລະ
ມາຈາກແຜ່ນດິນອ້ອມແອ້ມເປັນຈຳນວນຫົກພັນຄົນ, ນອກນັ້ນ
ຍັງມີ ຊາຍໜຸ່ມຊາວອຳໂມນອີກຫົກສິບຄົນ ຜູ້ທີ່ມາເຂົ້າຮ່ວມ
ກັບກອງທັບນ້ອຍສອງພັນຄົນຂອງຂ້າພະເຈົ້າ ຊຶ່ງເປັນພີ່ນ້ອງ
ຂອງພວກເຂົາເອງ. ແລະ ບັດນີ້ຈົ່ງເບິ່ງ, ພວກເຮົາມີກຳລັງ
ເພີ່ມຂຶ້ນ, ແທ້ຈິງແລ້ວ, ພວກເຮົາໄດ້ຮັບສະບຽງອາຫານຢ່າງ
ເຫລືອເຟືອຕື່ມອີກ.

๑๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນເປັນຄວາມປາດຖະໜາ
ຂອງພວກເຮົາທີ່ຈະສູ້ຮົບກັບກອງທັບທີ່ຖືກວາງໄວ້ເພື່ອ
ປ້ອງກັນເມືອງຄູມະໄນ.

๑๔ ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າຈະບອກໃຫ້ທ່ານຮູ້ວ່າ ຈາກ
ນັ້ນໄປບໍ່ດົນພວກເຮົາກໍໄດ້ສຳເລັດຕາມຄວາມປາດຖະໜາຂອງ
ພວກເຮົາ; ແທ້ຈິງແລ້ວ, ດ້ວຍກຳລັງອັນເຂັ້ມແຂງຂອງພວກ
ເຮົາ, ຫລືດ້ວຍສ່ວນໜຶ່ງຂອງກຳລັງອັນເຂັ້ມແຂງຂອງພວກ
ເຮົາ, ພວກເຮົາໄດ້ລ້ອມເມືອງຄູມະໄນໄວ້ໃນຕອນກາງຄືນ, ໃກ້
ເວລາທີ່ພວກເຂົາຈະໄດ້ຮັບສະບຽງອາຫານ.

Alma 57

And now it came to pass that I received an epistle from Ammoron, the king, stating that if I would deliver up those prisoners of war whom we had taken that he would deliver up the city of Antiparah unto us.

But I sent an epistle unto the king, that we were sure our forces were sufficient to take the city of Antiparah by our force; and by delivering up the prisoners for that city we should suppose ourselves unwise, and that we would only deliver up our prisoners on exchange.

And Ammoron refused mine epistle, for he would not exchange prisoners; therefore we began to make preparations to go against the city of Antiparah.

But the people of Antiparah did leave the city, and fled to their other cities, which they had possession of, to fortify them; and thus the city of Antiparah fell into our hands.

And thus ended the twenty and eighth year of the reign of the judges.

And it came to pass that in the commencement of the twenty and ninth year, we received a supply of provisions, and also an addition to our army, from the land of Zarahemla, and from the land round about, to the number of six thousand men, besides sixty of the sons of the Ammonites who had come to join their brethren, my little band of two thousand. And now behold, we were strong, yea, and we had also plenty of provisions brought unto us.

And it came to pass that it was our desire to wage a battle with the army which was placed to protect the city Cumeni.

And now behold, I will show unto you that we soon accomplished our desire; yea, with our strong force, or with a part of our strong force, we did surround, by night, the city Cumeni, a little before they were to receive a supply of provisions.

ຈ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ຕັ້ງຄ້າຍຢູ່ຮອບ
ເມືອງເປັນເວລາຫລາຍຄືນ; ແຕ່ວ່າພວກເຮົາໄດ້ນອນກັບດາບ
ແລະ ຈັດເວນຍາມໄວ້ເພື່ອຊາວເລມັນຈະບໍ່ໄດ້ມາໂຈມຕີພວກ
ເຮົາໃນເວລາກາງຄືນ ແລະ ຂ້າພວກເຮົາຖິ້ມ ຊຶ່ງພວກເຂົາເຄີຍ
ພະຍາຍາມມາກ່ອນແລ້ວຫລາຍເທື່ອ; ແຕ່ທຸກໆເທື່ອທີ່ພວກ
ເຂົາພະຍາຍາມແບບນີ້ ພວກເຂົາຕ້ອງໄດ້ເສຍເລືອດເນື້ອໄປ.

ຈ ຫລັງຈາກນັ້ນບໍ່ດົນສະບຽງອາຫານຂອງພວກເຂົາກໍ
ມາຮອດ ແລະ ກຳລັງທີ່ຈະເຂົ້າເມືອງໃນເວລາກາງຄືນ. ແລະ
ສະນັ້ນ, ພວກເຮົາ, ຊາວນີໄຟ ແທນທີ່ຈະເປັນຊາວເລມັນ ຈຶ່ງໄດ້
ຈັບພວກເຂົາ ແລະ ຍຶດເອົາສະບຽງອາຫານຂອງພວກເຂົາໄວ້.

ຈ ແລະ ເຖິງແມ່ນວ່າຊາວເລມັນຖືກຕັດອອກຈາກຄວາມ
ຊ່ວຍເຫລືອຂອງພວກເຂົາຕາມວິທີນີ້, ແຕ່ພວກເຂົາຍັງຕັ້ງໃຈທີ່
ຈະຮັກສາເມືອງນັ້ນໄວ້ຢູ່; ສະນັ້ນ ມັນຈຶ່ງເປັນການສົມຄວນທີ່
ພວກເຮົາຈະຍຶດເອົາສະບຽງອາຫານເຫລົ່ານີ້ ແລະ ສົ່ງມັນໄປ
ຫາເມືອງຢູດາຍ, ແລະ ສົ່ງຊະເລີຍເສີກຂອງພວກເຮົາໄປຫາ
ແຜ່ນດິນເຊຣາເຮັມລາ.

ຈ ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາຜ່ານໄປບໍ່ເທົ່າໃດມື້
ກ່ອນທີ່ຊາວເລມັນຈະໝົດຫວັງທີ່ຈະໄດ້ຮັບຄວາມຊ່ວຍເຫລືອ;
ສະນັ້ນ ພວກເຂົາຈຶ່ງຍອມມອບເມືອງໃຫ້ຢູ່ໃນກຳມືຂອງພວກ
ເຮົາ; ແລະ ພວກເຮົາຈຶ່ງສຳເລັດຜົນດັ່ງນີ້ ຕາມແຜນການຂອງ
ພວກເຮົາທີ່ຈະຍຶດເອົາເມືອງຄູມະໄນໄວ້.

ຈ ແຕ່ເຫດການໄດ້ບັງເກີດຂຶ້ນຄື ຊະເລີຍເສີກຂອງພວກເຮົາມີ
ເປັນຈຳນວນຫລວງຫລາຍ, ຊຶ່ງຫລາຍກວ່າຈຳນວນທະຫານ
ຂອງພວກເຮົາ, ພວກເຮົາຈຳເປັນຕ້ອງໃຊ້ກຳລັງທັງໝົດຂອງ
ພວກເຮົາເພື່ອເຝົ້າຍາມ ແລະ ໄດ້ຂ້າຈຳນວນໜຶ່ງຖິ້ມ.

ຈ ເພາະຈົ່ງເບິ່ງ, ພວກເຂົາເປັນຈຳນວນຫລວງຫລາຍທີ່
ພະຍາຍາມໂຕນໜີ ແລະ ຕໍ່ສູ້ດ້ວຍກ້ອນຫີນ, ຫລື ດ້ວຍ
ໄມ້ຄ້ອນ, ຫລື ດ້ວຍອັນໃດກໍແລ້ວແຕ່ທີ່ພວກເຂົາຈະຫາມາໄດ້,
ເຖິງຂະໜາດທີ່ພວກເຮົາໄດ້ຂ້າພວກເຂົາຖິ້ມເຖິງສອງພັນຄົນ
ຫລັງຈາກທີ່ພວກເຂົາຍອມມອບຕົວເປັນຊະເລີຍເສີກແລ້ວ.

ຈ ສະນັ້ນ ມັນຈຶ່ງສົມຄວນສຳລັບພວກເຮົາທີ່ຈະຂ້າພວກເຂົາ,
ຫລື ຕ້ອງຍາມພວກເຂົາດ້ວຍດາບໃນມື, ແລະ ພວກເຮົາຈຶ່ງໄດ້
ພາພວກເຂົາລົງໄປຫາແຜ່ນດິນເຊຣາເຮັມລາ; ແລະ ເພາະ
ສະບຽງອາຫານຂອງພວກເຮົາລວມທັງເຄື່ອງທີ່ຍຶດມາໄດ້ຈາກ
ຊາວເລມັນກໍຍັງບໍ່ພໍສຳລັບທະຫານຂອງພວກເຮົາເອງຢູ່ແລ້ວ.

And it came to pass that we did camp round about the city for many nights; but we did sleep upon our swords, and keep guards, that the Lamanites could not come upon us by night and slay us, which they attempted many times; but as many times as they attempted this their blood was spilt.

At length their provisions did arrive, and they were about to enter the city by night. And we, instead of being Lamanites, were Nephites; therefore, we did take them and their provisions.

And notwithstanding the Lamanites being cut off from their support after this manner, they were still determined to maintain the city; therefore it became expedient that we should take those provisions and send them to Judea, and our prisoners to the land of Zarahemla.

And it came to pass that not many days had passed away before the Lamanites began to lose all hopes of succor; therefore they yielded up the city unto our hands; and thus we had accomplished our designs in obtaining the city Cumeni.

But it came to pass that our prisoners were so numerous that, notwithstanding the enormity of our numbers, we were obliged to employ all our force to keep them, or to put them to death.

For behold, they would break out in great numbers, and would fight with stones, and with clubs, or whatsoever thing they could get into their hands, insomuch that we did slay upwards of two thousand of them after they had surrendered themselves prisoners of war.

Therefore it became expedient for us, that we should put an end to their lives, or guard them, sword in hand, down to the land of Zarahemla; and also our provisions were not any more than sufficient for our own people, notwithstanding that which we had taken from the Lamanites.

ແລະ ບັດນີ້, ໃນສະພາບອັນໜ້າວິຕົກເຊັ່ນນີ້, ມັນຈຶ່ງເປັນ
ເລື່ອງໜັກທີ່ສຸດທີ່ຈະຕັດສິນໃຈກ່ຽວກັບຊະເລີຍເສີກເຫລົ່ານີ້;
ເຖິງຢ່າງໃດກໍຕາມ, ພວກເຮົາຍັງໄດ້ຕົກລົງໃຈທີ່ຈະສົ່ງພວກ
ເຂົາໄປຫາແຜ່ນດິນເຊຣາເຮັມລາ; ສະນັ້ນ ພວກເຮົາຈຶ່ງໄດ້
ເລືອກເອົາຄົນຂອງພວກເຮົາສ່ວນໜຶ່ງ, ແລະ ມອບໜ້າທີ່ໃຫ້
ພວກເຂົາເຝົ້າຍາມຊະເລີຍເສີກໃນຂະນະທີ່ກຳລັງພາພວກເຂົາ
ລົງໄປຫາແຜ່ນດິນເຊຣາເຮັມລາ.

ແຕ່ວ່າເຫດການໄດ້ບັງເກີດຂຶ້ນຄື ໃນມື້ຕໍ່ມາ ພວກເຂົາໄດ້ກັບ
ຄືນມາ. ແລະ ບັດນີ້ຈົ່ງເບິ່ງ, ພວກເຮົາບໍ່ໄດ້ສອບຖາມພວກເຂົາ
ກ່ຽວກັບຊະເລີຍເສີກເຫລົ່ານັ້ນເລີຍ; ເພາະຈົ່ງເບິ່ງ, ຊາວເລມັນ
ໄດ້ມາໂຈມຕີພວກເຮົາ, ແລະ ພວກເຂົາມາທັນເວລາພໍດີເພື່ອ
ຊ່ວຍເຫລືອພວກເຮົາໃຫ້ພົ້ນຈາກການຕົກໄປຢູ່ໃນກຳມືຂອງ
ພວກຊາວເລມັນ. ເພາະຈົ່ງເບິ່ງ, ອາມໂມຣອນໄດ້ສົ່ງສະບຽງ
ອາຫານມາຊ່ວຍພວກເຂົາພ້ອມດ້ວຍກຳລັງພົນເປັນຈຳນວນ
ຫລວງຫລາຍ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກຜູ້ຊາຍຊຶ່ງພວກເຮົາໄດ້
ສົ່ງໄປກັບຊະເລີຍເສີກນັ້ນໄດ້ມາຮອດທັນເວລາເພື່ອຢັບຢັ້ງ
ສັດຕູໄວ້, ຂະນະທີ່ພວກເຂົາກຳລັງຈະຊະນະພວກເຮົາຢູ່ແລ້ວ.

ແຕ່ຈົ່ງເບິ່ງ, ກອງທັບນ້ອຍຈຳນວນສອງພັນຫົກສິບຄົນນັ້ນ
ໄດ້ຕໍ່ສູ້ຢ່າງດຸເດືອດ; ແທ້ຈິງແລ້ວ, ພວກເຂົາເຂັ້ມແຂງໃນການສູ້
ຮົບ ແລະ ຕໍ່ຕ້ານກັບຊາວເລມັນ, ແລະ ໄດ້ຂ້າທຸກຄົນທີ່ຂັດຂວາງ
ພວກເຂົາ.

ແລະ ເວລາກອງທັບທີ່ເຫລືອຢູ່ຂອງພວກເຮົາກຳລັງຈະຍອມ
ແພ້ໃຫ້ແກ່ຊາວເລມັນຢູ່ນັ້ນ, ຈົ່ງເບິ່ງ, ທະຫານສອງພັນຫົກ
ສິບຄົນນັ້ນຍັງເຂັ້ມແຂງ ແລະ ບໍ່ຫວັ່ນໄຫວເລີຍ.

ແທ້ຈິງແລ້ວ, ພວກເຂົາໄດ້ເຊື່ອຟັງ ແລະ ຕັ້ງໃຈປະຕິບັດຕາມ
ຄຳສັ່ງທຸກຄຳຢ່າງເຄັ່ງຄັດ; ແທ້ຈິງແລ້ວ, ມັນເປັນໄປເຊັ່ນນີ້ຕາມ
ສັດທາຂອງພວກເຂົາ; ແລະ ຂ້າພະເຈົ້າໄດ້ຈື່ຈຳຄຳເວົ້າທີ່ພວກ
ເຂົາເວົ້າກັບຂ້າພະເຈົ້າວ່າ ແມ່ຂອງພວກເຂົາໄດ້ສິດສອນພວກ
ເຂົາ.

ແລະ ບັດນີ້ຈົ່ງເບິ່ງ, ພວກເຮົາເປັນໜີ້ຊີວິດຕໍ່ພວກລູກຊາຍ
ເຫລົ່ານີ້ກັບພວກທີ່ຖືກເລືອກໃຫ້ໄປສົ່ງຊະເລີຍເສີກເຫລົ່ານັ້ນ
ສຳລັບໄຊຊະນະເທື່ອນີ້; ເພາະພວກເຂົາເປັນຜູ້ທີ່ຕີຊາວເລມັນ
ໃຫ້ແຕກຜ່າຍໄປ; ສະນັ້ນ ພວກນັ້ນຈຶ່ງຖືກຂັບໄລ່ກັບໄປຫາ
ເມືອງແມນທາຍ.

ແລະ ພວກເຮົາໄດ້ຍຶດເອົາເມືອງຄູມະໄນໄວ້; ແລະ ບໍ່ໄດ້ຖືກ
ທຳລາຍທັງໝົດດ້ວຍດາບ; ເຖິງຢ່າງໃດກໍຕາມ, ພວກເຮົາກໍຍັງ
ໄດ້ຮັບການເສຍຫາຍຢ່າງຫລວງຫລາຍ.

And now, in those critical circumstances, it became a very serious matter to determine concerning these prisoners of war; nevertheless, we did resolve to send them down to the land of Zarahemla; therefore we selected a part of our men, and gave them charge over our prisoners to go down to the land of Zarahemla.

But it came to pass that on the morrow they did return. And now behold, we did not inquire of them concerning the prisoners; for behold, the Lamanites were upon us, and they returned in season to save us from falling into their hands. For behold, Ammoron had sent to their support a new supply of provisions and also a numerous army of men.

And it came to pass that those men whom we sent with the prisoners did arrive in season to check them, as they were about to overpower us.

But behold, my little band of two thousand and sixty fought most desperately; yea, they were firm before the Lamanites, and did administer death unto all those who opposed them.

And as the remainder of our army were about to give way before the Lamanites, behold, those two thousand and sixty were firm and undaunted.

Yea, and they did obey and observe to perform every word of command with exactness; yea, and even according to their faith it was done unto them; and I did remember the words which they said unto me that their mothers had taught them.

And now behold, it was these my sons, and those men who had been selected to convey the prisoners, to whom we owe this great victory; for it was they who did beat the Lamanites; therefore they were driven back to the city of Manti.

And we retained our city Cumeni, and were not all destroyed by the sword; nevertheless, we had suffered great loss.

ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກຊາວເລມັນໄດ້ໜີ ໄປແລ້ວ, ຂ້າພະເຈົ້າໄດ້ອອກຄຳສັ່ງທັນທີว່າ ໃຫ້ຍ້າຍທະຫານ ຂອງຂ້າພະເຈົ້າຜູ້ທີ່ໄດ້ຮັບບາດເຈັບອອກຈາກຜູ້ທີ່ຕາຍ, ແລະ ສັ່ງໃຫ້ປິ່ນປົວບາດແຜຂອງພວກເຂົາ.

And it came to pass that after the Lamanites had fled, I immediately gave orders that my men who had been wounded should be taken from among the dead, and caused that their wounds should be dressed.

ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນມີຢູ່ສອງຮ້ອຍຄົນໃນ ສອງພັນຫົກສິບຄົນຂອງຂ້າພະເຈົ້າທີ່ໄດ້ໝົດສະຕິໄປ ເພາະ ການເສຍເລືອດຢ່າງໜັກ; ເຖິງຢ່າງໃດກໍຕາມ, ດ້ວຍພຣະກະລຸ ນາທິຄຸນຂອງພຣະເຈົ້າ, ແລະ ຕໍ່ຄວາມແປກປະຫລາດໃຈ ຫລາຍທີ່ສຸດແກ່ພວກເຮົາ, ແລະ ດ້ວຍຄວາມປິຕິຍິນດີຫລາຍ ແກ່ກອງທັບທັງໝົດຂອງພວກເຮົາ, ເພາະວ່າ ບໍ່ມີຜູ້ໃດເລີຍໃນ ພວກເຂົາທີ່ຖືກຂ້າ; ແທ້ຈິງແລ້ວ, ແລະ ບໍ່ມີຈັກຄົນໃນບັນດາ ພວກເຂົາທີ່ບໍ່ໄດ້ຮັບບາດເຈັບຫລາຍບ່ອນ.

And it came to pass that there were two hundred, out of my two thousand and sixty, who had fainted because of the loss of blood; nevertheless, according to the goodness of God, and to our great astonishment, and also the joy of our whole army, there was not one soul of them who did perish; yea, and neither was there one soul among them who had not received many wounds.

ແລະ ບັດນີ້, ການຮັກສາທີ່ພວກເຂົາໄດ້ຮັບນັ້ນເປັນການ ແປກປະຫລາດໃຈແກ່ທົ່ວກອງທັບຂອງພວກເຮົາ, ແທ້ຈິງ ແລ້ວ, ພວກເຂົາໄດ້ຮັບການໄວ້ຊີວິດໃນຂະນະທີ່ພີ່ນ້ອງຂອງ ພວກເຮົາຫລາຍພັນຄົນຖືກຂ້າຕາຍ. ແລະ ພວກເຮົາເຊື່ອຢ່າງ ແນ່ນອນว່າມັນເປັນ ອຳນາດອັນໜ້າອັດສະຈັນໃຈຂອງ ພຣະເຈົ້າ, ຍ້ອນว່າ ສັດທາຂອງພວກເຂົາມີຫລາຍທີ່ສຸດ ແລະ ພວກເຂົາໄດ້ຮັບການສິດສອນໃຫ້ເຊື່ອ—ว່າມັນມີພຣະເຈົ້າຜູ້ ທ່ຽງທຳ, ແລະ ຜູ້ໃດກໍຕາມທີ່ບໍ່ສົງໄສ, ຜູ້ນັ້ນຈະໄດ້ຮັບການປົກ ປັກຮັກສາໄວ້ໂດຍອຳນາດອັນໜ້າອັດສະຈັນຂອງພຣະອົງ.

And now, their preservation was astonishing to our whole army, yea, that they should be spared while there was a thousand of our brethren who were slain. And we do justly ascribe it to the miraculous power of God, because of their exceeding faith in that which they had been taught to believe—that there was a just God, and whosoever did not doubt, that they should be preserved by his marvelous power.

ບັດນີ້ ນີ້ຄືສັດທາຂອງພວກເຂົາ ຊຶ່ງຂ້າພະເຈົ້າໄດ້ກ່າວມາ ແລ້ວ; ພວກເຂົາຍັງໜຸ່ມນ້ອຍ, ແລະ ຈິດໃຈຂອງພວກເຂົາເຂັ້ມ ແຂງ, ແລະ ພວກເຂົາມີຄວາມໄວ້ວາງใจໃນພຣະເຈົ້າຕະຫລອດ ເວລາ.

Now this was the faith of these of whom I have spoken; they are young, and their minds are firm, and they do put their trust in God continually.

ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກທີ່ພວກເຮົາ ໄດ້ພະຍາບານຜູ້ຄົນຂອງພວກເຮົາຜູ້ທີ່ໄດ້ຮັບບາດເຈັບ, ແລະ ໄດ້ຝັງສົບຄົນຂອງພວກເຮົາ ແລະ ຊາວເລມັນ ຊຶ່ງມີຢູ່ຢ່າງ ຫລວງຫລາຍແລ້ວ, ຈົ່ງເບິ່ງ, ພວກເຮົາໄດ້ຖາມກິດກ່ຽວກັບ ຊະເລີຍເສີກ ຊຶ່ງພວກເຂົາໄດ້ພາລົງໄປຫາແຜ່ນດິນເຊຣາເຮັມ ລາ.

And now it came to pass that after we had thus taken care of our wounded men, and had buried our dead and also the dead of the Lamanites, who were many, behold, we did inquire of Gid concerning the prisoners whom they had started to go down to the land of Zarahemla with.

ບັດນີ້ກິດເປັນຫົວໜ້ານາຍທະຫານຄວບຄຸມກຸ່ມທະຫານຜູ້ ຖືກແຕ່ງຕັ້ງໃຫ້ຄຸມພວກຊະເລີຍເສີກໄປຫາແຜ່ນດິນນັ້ນ.

Now Gid was the chief captain over the band who was appointed to guard them down to the land.

ແລະ ບັດນີ້ ນີ້ຄືຄຳເວົ້າຂອງກິດທີ່ໄດ້ເວົ້າກັບຂ້າພະເຈົ້າว່າ: ຈົ່ງເບິ່ງ, ພວກເຮົາໄດ້ເລີ່ມເດີນທາງລົງໄປຫາແຜ່ນດິນເຊຣາ ເຮັມລາພ້ອມດ້ວຍຊະເລີຍເສີກຂອງພວກເຮົາ. ແລະ ເຫດການ ໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ພົບກັບພວກນັກສືບຂອງ ກອງທັບຂອງພວກເຮົາ ຜູ້ຊຶ່ງໄດ້ຖືກສົ່ງໃຫ້ໄປຕິດຕາມເບິ່ງຄ້າຍ ຂອງຊາວເລມັນ.

And it came to pass that because of so much contention and so much difficulty in the government, that they had not kept sufficient guards in the land of Zarahemla; for they had supposed that the Lamanites durst not come into the heart of their lands to attack that great city Zarahemla.

໑໙ ແຕ່ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທະເມີໄດ້ເດີນທັບນຳໜ້າກອງທະຫານອັນມະຫາສານຂອງລາວມາ, ແລະ ເຂົ້າໂຈມຕີຜູ້ອາໄສຢູ່ໃນເມືອງນັ້ນ, ແລະ ການເດີນທັບຂອງພວກເຂົານັ້ນວ່ອງໄວທີ່ສຸດ ຈົນວ່າຊາວນີໄຟບໍ່ມີເວລາພຽງພໍທີ່ຈະເຕົ້າໂຮມກຳລັງກອງທັບຂອງຕົນ.

But it came to pass that Coriantumr did march forth at the head of his numerous host, and came upon the inhabitants of the city, and their march was with such exceedingly great speed that there was no time for the Nephites to gather together their armies.

໒໐ ສະນັ້ນ ໂຄຣິອານທະເມີຈຶ່ງໄດ້ຂ້າທະຫານຍາມທາງເຂົ້າເມືອງ, ແລະ ໄດ້ຍົກກອງທັບເຂົ້າໄປໃນເມືອງ ພ້ອມດ້ວຍກອງທັບທັງໝົດຂອງລາວ, ແລະ ພວກເຂົາໄດ້ຂ້າທຸກຄົນທີ່ຂັດຂວາງພວກເຂົາ, ເຖິງຂະໜາດທີ່ພວກເຂົາໄດ້ເຂົ້າເປັນເຈົ້າຂອງເມືອງທັງເມືອງ.

Therefore Coriantumr did cut down the watch by the entrance of the city, and did march forth with his whole army into the city, and they did slay every one who did oppose them, insomuch that they did take possession of the whole city.

໒໑ ແລະ ເຫດການໄດ້ບັງເກີດຂຶ້ນຄື ເພຄິວເມໄນ, ຜູ້ເປັນຫົວໜ້າຜູ້ຕັດສິນໄດ້ແລ່ນໜີໄປຕໍ່ໜ້າໂຄຣິອານທະເມີ, ໄປຮອດກຳແພງເມືອງ. ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທະເມີໄດ້ຟັນລາວຕິດກຳແພງຈົນລາວຕາຍ. ແລະ ວັນເວລາຂອງເພຄິວເມໄນກໍໄດ້ສິ້ນສຸດລົງດັ່ງນີ້.

And it came to pass that Pacumeni, who was the chief judge, did flee before Coriantumr, even to the walls of the city. And it came to pass that Coriantumr did smite him against the wall, insomuch that he died. And thus ended the days of Pacumeni.

ຄ

ແລະ ບັດນີ້ເວລາໂຄຣິອານທະເມີເຫັນວ່າຕົນເອງໄດ້ຄອບຄອງເມືອງເຊຣາເຮັມລາແລ້ວ, ແລະ ເຫັນວ່າຊາວນີໄຟໄດ້ປົບໜີໄປຕໍ່ໜ້າພວກເຂົາ, ແລະ ໄດ້ຖືກຂ້າ, ແລະ ໄດ້ຖືກຈັບເຂົ້າຄຸກ, ແລະ ວ່າລາວໄດ້ຍຶດທີ່ໝັ້ນອັນເຂັ້ມແຂງທີ່ສຸດໃນທົ່ວແຜ່ນດິນໄດ້ແລ້ວ, ໃຈຂອງລາວກໍມີກຳລັງຂຶ້ນ ເຖິງຂະໜາດທີ່ລາວຄິດຈະຍົກທັບໄປສູ້ຮົບທົ່ວແຜ່ນດິນ.

ຄນ

ແລະ ບັດນີ້ລາວບໍ່ໄດ້ຢຸດຢູ່ໃນແຜ່ນດິນເຊຣາເຮັມລາເລີຍ, ແຕ່ລາວໄດ້ຍົກທັບໄປດ້ວຍກອງທັບໃຫຍ່ຂອງລາວ, ແລະ ມຸ້ງໜ້າໄປຫາເມືອງອຸດົມສົມບູນ; ເພາະວ່າມັນເປັນຄວາມຕັ້ງໃຈຂອງລາວທີ່ຈະຍົກທັບໄປ ແລະ ຈະຟາດຟັນໄປຕະຫລອດທາງ, ເພື່ອຈະໄດ້ຍຶດເອົາແຜ່ນດິນພາກສ່ວນຕ່າງໆທາງເໜືອ.

ຄສ

ແລະ ໂດຍທີ່ຄິດວ່າກຳລັງສ່ວນໃຫຍ່ທີ່ສຸດຂອງຊາວນີໄຟຕັ້ງຢູ່ທີ່ໃຈກາງຂອງແຜ່ນດິນ, ສະນັ້ນ ລາວຈຶ່ງໄດ້ຍົກທັບໄປໂດຍບໍ່ໃຫ້ພວກເຂົາເຕົ້າໂຮມກັນໄດ້ ແຕ່ເປັນກຸ່ມນ້ອຍໆເທົ່ານັ້ນ; ແລະ ໂດຍວິທີນີ້ ພວກເຂົາຈຶ່ງໄດ້ເຂົ້າໂຈມຕີ ແລະ ຟາດຟັນພວກເຂົາລົງກັບພື້ນດິນ.

ຄຫ

ແຕ່ຈົ່ງເບິ່ງ, ເທື່ອນີ້ໂຄຣິອານທະເມີໄດ້ເດີນທັບຜ່ານໃຈກາງຂອງແຜ່ນດິນໄປ ມັນຈຶ່ງເຮັດໃຫ້ໂມໂຣໄນຮາໄດ້ປຽບພວກເຂົາ, ເຖິງແມ່ນວ່າຊາວນີໄຟຈຳນວນຫລວງຫລາຍຖືກຂ້າຕາຍໄປແລ້ວກໍຕາມ.

ຄຈ

ເພາະຈົ່ງເບິ່ງ, ໂມໂຣໄນຮາຄິດວ່າຊາວເລມັນບໍ່ກ້າເຂົ້າມາໃຈກາງຂອງແຜ່ນດິນ, ພຽງແຕ່ວ່າຈະເຂົ້າໂຈມຕີຫົວເມືອງຕ່າງໆໂດຍອ້ອມແອ້ມຊາຍແດນຄືກັນກັບທີ່ຊາວເລມັນໄດ້ເຮັດມາກ່ອນແລ້ວ; ສະນັ້ນ ໂມໂຣໄນຮາຈຶ່ງໄດ້ສັ່ງໃຫ້ກອງທັບອັນເຂັ້ມແຂງຂອງລາວໄປຮັກສາແຜ່ນດິນພາກສ່ວນຕ່າງໆໂດຍອ້ອມຮອບໃກ້ຊາຍແດນ.

ຄຊ

ແຕ່ຈົ່ງເບິ່ງ, ຊາວເລມັນບໍ່ໄດ້ຢ້ານກົວໃນສິ່ງທີ່ລາວເຮັດໄປນັ້ນເລີຍ, ເພາະພວກເຂົາໄດ້ຍົກທັບເຂົ້າເຖິງໃຈກາງຂອງແຜ່ນດິນແລ້ວ, ແລະ ໄດ້ຍຶດເອົາເມືອງຫລວງ ຊຶ່ງຄືເມືອງເຊຣາເຮັມລາ, ແລະ ກຳລັງເດີນທັບຜ່ານຫລາຍຫົວເມືອງທີ່ສຳຄັນທີ່ສຸດຂອງແຜ່ນດິນ, ແລະ ຂ້າຜູ້ຄົນຢ່າງຫລວງຫລາຍກ່າຍກອງ, ທັງຜູ້ຊາຍ, ຜູ້ຍິງ, ແລະ ເດັກນ້ອຍ, ຍຶດເອົາຫລາຍຫົວເມືອງ ແລະ ທີ່ໝັ້ນຫລາຍບ່ອນ.

ຄຊສ

ແຕ່ເມື່ອໂມໂຣໄນຮາຮູ້ຈັກເລື່ອງນີ້ແລ້ວ, ລາວກໍໄດ້ສົ່ງລີໄຮພ້ອມດ້ວຍກອງທະຫານໄປປົດລ້ອມທັນທີ ເພື່ອຈະໄດ້ສະກັດກັ້ນພວກເຂົາກ່ອນທີ່ພວກເຂົາຈະມາຮອດແຜ່ນດິນອຸດົມສົມບູນ.

And now when Coriantumr saw that he was in possession of the city of Zarahemla, and saw that the Nephites had fled before them, and were slain, and were taken, and were cast into prison, and that he had obtained the possession of the strongest hold in all the land, his heart took courage insomuch that he was about to go forth against all the land.

And now he did not tarry in the land of Zarahemla, but he did march forth with a large army, even towards the city of Bountiful; for it was his determination to go forth and cut his way through with the sword, that he might obtain the north parts of the land.

And, supposing that their greatest strength was in the center of the land, therefore he did march forth, giving them no time to assemble themselves together save it were in small bodies; and in this manner they did fall upon them and cut them down to the earth.

But behold, this march of Coriantumr through the center of the land gave Moronihah great advantage over them, notwithstanding the greatness of the number of the Nephites who were slain.

For behold, Moronihah had supposed that the Lamanites durst not come into the center of the land, but that they would attack the cities round about in the borders as they had hitherto done; therefore Moronihah had caused that their strong armies should maintain those parts round about by the borders.

But behold, the Lamanites were not frightened according to his desire, but they had come into the center of the land, and had taken the capital city which was the city of Zarahemla, and were marching through the most capital parts of the land, slaying the people with a great slaughter, both men, women, and children, taking possession of many cities and of many strongholds.

But when Moronihah had discovered this, he immediately sent forth Lehi with an army round about to head them before they should come to the land Bountiful.

ຄ໗ ແລະ ລາວໄດ້ເຮັດເຊັ່ນນີ້; ແລະ ໄດ້ສະກັດກັ້ນພວກເຂົາໄວ້ກ່ອນທີ່ພວກເຂົາຈະມາຮອດແຜ່ນດິນອຸດົມສົມບູນ, ແລະ ໄດ້ເຂົ້າໂຈມຕີພວກເຂົາ, ເຖິງຂະໜາດທີ່ພວກເຂົາເລີ່ມຖອຍທັບກັບຄືນໄປເຊຣາເຮັມລາ.

ມ໐ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນຮາໄດ້ສະກັດກັ້ນພວກເຂົາໄວ້ໃນລະຫว่າງການຖອຍທັບຂອງພວກເຂົາ, ແລະ ໄດ້ເຂົ້າສູ້ຮົບກັນ, ເຖິງຂະໜາດທີ່ມັນກາຍເປັນການຕໍ່ສູ້ອັນນອງເລືອດທີ່ສຸດ; ແທ້ຈິງແລ້ວ, ຄົນເປັນຈຳນວນຫລວງຫລາຍຖືກຂ້າ, ແລະ ໃນບັນດາພວກທີ່ຕາຍນັ້ນມີ �โคริอานุมาร ນຳ.

ມ໑ ແລະ ບັດນີ້, ຈົ່ງເບິ່ງຊາວເລມັນຈະຖອຍທັບໄປທາງໃດກໍບໍ່ໄດ້, ບໍ່ວ່າຈະເປັນທາງເໜືອ, ຫລື ທາງໃຕ້, ຫລື ທາງຕາເວັນອອກ, ຫລື ທາງຕາເວັນຕົກ, ເພາະວ່າພວກເຂົາຖືກຊາວນີໄຟອ້ອມໄວ້ທຸກດ້ານ.

ມ໒ ແລະ ສະຫລຸບຄວາມແລ້ວ โคริอานุมาร ໄດ້ນຳເອົາຊາວເລມັນເຂົ້າໄປເຖິງໃຈກາງຂອງຊາວນີໄຟ, ເຖິງຂະໜາດທີ່ພວກເຂົາຕົກຢູ່ໃນອຳນາດຂອງຊາວນີໄຟ, ແລະ ຕົວລາວເອງກໍຖືກຂ້າຕາຍ, ແລະ ຊາວເລມັນໄດ້ຍອມມອບຕົວໃຫ້ຢູ່ໃນກຳມືຂອງຊາວນີໄຟ.

ມ໓ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມໂຣໄນຮາໄດ້ຍຶດເອົາເມືອງເຊຣາເຮັມລາຄືນອີກ, ແລະ ສັ່ງໃຫ້ຊາວເລມັນຜູ້ທີ່ຖືກຈັບມາເປັນຊະເລີຍເສີກນັ້ນອອກຈາກແຜ່ນດິນໂດຍສັນຕິ.

ມ໔ ແລະ ປີທີສີ່ສິບເອັດແຫ່ງການປົກຄອງຂອງຜູ້ຕັດສິນໄດ້ສິ້ນສຸດລົງດັ່ງນີ້.

And thus he did; and he did head them before they came to the land Bountiful, and gave unto them battle, insomuch that they began to retreat back towards the land of Zarahemla.

And it came to pass that Moronihah did head them in their retreat, and did give unto them battle, insomuch that it became an exceedingly bloody battle; yea, many were slain, and among the number who were slain Coriantumr was also found.

And now, behold, the Lamanites could not retreat either way, neither on the north, nor on the south, nor on the east, nor on the west, for they were surrounded on every hand by the Nephites.

And thus had Coriantumr plunged the Lamanites into the midst of the Nephites, insomuch that they were in the power of the Nephites, and he himself was slain, and the Lamanites did yield themselves into the hands of the Nephites.

And it came to pass that Moronihah took possession of the city of Zarahemla again, and caused that the Lamanites who had been taken prisoners should depart out of the land in peace.

And thus ended the forty and first year of the reign of the judges.

ຮີລາມັນ ๒

๑ ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີສີ່ສິບສອງແຫ່ງການ ປົກຄອງຂອງຜູ້ຕັດສິນ, ຫລັງຈາກໂມໂຣໄນຮາໄດ້ສະຖາປະນາ ສັນຕິພາບຂຶ້ນອີກລະຫว่າງຊາວນີໄຟກັບຊາວເລມັນແລ້ວ, ຈົ່ງ ເບິ່ງ ບໍ່ມີຜູ້ໃດເລີຍທີ່ຈະຂຶ້ນສູ່ບັນລັງຕັດສິນ; ສະນັ້ນ ມັນຈົ່ງເລີ່ມ ມີການຂັດແຍ້ງກັນຂຶ້ນອີກໃນບັນດາຜູ້ຄົນກ່ຽວກັບວ່າ ຜູ້ໃດ ສົມຄວນທີ່ຈະໄດ້ຂຶ້ນສູ່ບັນລັງຕັດສິນແທນ.

๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ຮີລາມັນຜູ້ເປັນລູກຊາຍຂອງ ຮີລາມັນໄດ້ຖືກແຕ່ງຕັ້ງໃຫ້ຂຶ້ນສູ່ບັນລັງຕັດສິນແທນໂດຍສຽງ ຂອງຜູ້ຄົນ.

๓ ແຕ່ ຈົ່ງເບິ່ງ, ຄິດຄູເມັນຜູ້ໄດ້ລອບຂ້າເພໂຮຮັນໄດ້ພະຍາຍາມ ທີ່ຈະທຳລາຍຊີວິດຂອງຮີລາມັນຄືກັນ; ແລະ ລາວໄດ້ຮັບການ ສະໜັບສະໜູນຈາກພັກພວກຂອງລາວ, ຜູ້ຊຶ່ງໄດ້ເຮັດພັນທະ ສັນຍາຮ່ວມກັນວ່າຈະບໍ່ບອກໃຫ້ຜູ້ໃດຮູ້ຈັກເຖິງຄວາມຊົ່ວຮ້າຍ ຂອງລາວ.

๔ ເພາະມີຊາຍຄົນໜຶ່ງຊື່ວ່າ ແກດີອານທັນ ເປັນຜູ້ທີ່ມີຄວາມ ຊຳນິຊຳນານໃນການປາກເວົ້າ ແລະ ກົນອຸບາຍເລ່ຫລ່ຽມທີ່ຈະ ເຮັດວຽກງານລັບກ່ຽວກັບການຄາດຕະກຳ ແລະ ປຸ້ນຈີ້; ສະນັ້ນ ລາວຈົ່ງໄດ້ກາຍມາເປັນຜູ້ນຳຂອງພັກຄິດຄູເມັນ.

๕ ສະນັ້ນ ລາວຈົ່ງໄດ້ເວົ້າຄົນຍົກຍ້ອງພວກເຂົາ, ແລະ ຄິດຄູເມັນນຳອີກ ວ່າຖ້າຫາກພວກເຂົາຈະໃຫ້ລາວໄດ້ຂຶ້ນນັ່ງບັນລັງຕັດສິນ ແລ້ວ ລາວຈະໃຫ້ຜູ້ທີ່ຢູ່ໃນພັກຂອງລາວມີອຳນາດ ແລະ ສິດອຳນາດ ທີ່ສູງໃນບັນດາຜູ້ຄົນ; ສະນັ້ນ ຄິດຄູເມັນຈົ່ງພະຍາຍາມທີ່ຈະຂ້າ ຮີລາມັນເສຍ.

๖ ແລະ ເຫດການໄດ້ບັງເກີດຂຶ້ນໃນຂະນະທີ່ລາວກຳລັງ ເດີນທາງໄປຫາບັນລັງຕັດສິນເພື່ອຈະທຳຮ້າຍຮີລາມັນຢູ່ນັ້ນ, ຈົ່ງເບິ່ງ ຂ້າໃຊ້ຄົນໜຶ່ງຂອງຮີລາມັນໄດ້ປອມຕົວອອກໄປ ຂ້າງນອກໃນເວລາກາງຄືນ, ສະນັ້ນ ລາວຈົ່ງໄດ້ຮູ້ຈັກເຖິງ ແຜນການຊຶ່ງພັກນີ້ວາງຂຶ້ນເພື່ອຈະໄດ້ທຳຮ້າຍຮີລາມັນ—

๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າໃຊ້ຂອງຮີລາມັນໄດ້ພົບ ກັບຄິດຄູເມັນ, ແລະ ໄດ້ໃຫ້ສັນຍານແກ່ລາວ; ສະນັ້ນ ຄິດຄູເມັນ ຈົ່ງໄດ້ບອກໃຫ້ລາວຮູ້ເຖິງຄວາມປາດຖະໜາຂອງຕົນ, ໂດຍ ປາດຖະໜາທີ່ຈະໃຫ້ລາວນຳລາວໄປຫາບັນລັງຕັດສິນເພື່ອວ່າ ລາວຈະໄດ້ລອບຂ້າຮີລາມັນເສຍ.

Helaman 2

And it came to pass in the forty and second year of the reign of the judges, after Moronihah had established again peace between the Nephites and the Lamanites, behold there was no one to fill the judgment-seat; therefore there began to be a contention again among the people concerning who should fill the judgment-seat.

And it came to pass that Helaman, who was the son of Helaman, was appointed to fill the judgment-seat, by the voice of the people.

But behold, Kishkumen, who had murdered Pahoran, did lay wait to destroy Helaman also; and he was upheld by his band, who had entered into a covenant that no one should know his wickedness.

For there was one Gadianton, who was exceedingly expert in many words, and also in his craft, to carry on the secret work of murder and of robbery; therefore he became the leader of the band of Kishkumen.

Therefore he did flatter them, and also Kishkumen, that if they would place him in the judgment-seat he would grant unto those who belonged to his band that they should be placed in power and authority among the people; therefore Kishkumen sought to destroy Helaman.

And it came to pass as he went forth towards the judgment-seat to destroy Helaman, behold one of the servants of Helaman, having been out by night, and having obtained, through disguise, a knowledge of those plans which had been laid by this band to destroy Helaman—

And it came to pass that he met Kishkumen, and he gave unto him a sign; therefore Kishkumen made known unto him the object of his desire, desiring that he would conduct him to the judgment-seat that he might murder Helaman.

ຄ ແລະ ເວລາຂ້າໃຊ້ຂອງຮີລາມັນຮູ້ຈັກເຖິງເລື່ອງໃນໃຈຂອງຄິດ
ຄູເມັນທັງໝົດ, ແລະ ຮູ້ຈັກເຖິງຈຸດປະສົງຂອງລາວທີ່ຫວັງຈະ
ຂ້າ, ແລະ ຮູ້ຈັກອີກວ່າມັນເປັນຈຸດປະສົງຂອງທຸກຄົນທີ່ຢູ່ໃນ
ພັກຂອງລາວທີ່ຫວັງຈະຂ້າຄືກັນ, ແລະ ຫວັງທີ່ຈະລັກ, ແລະ
ຫວັງທີ່ຈະຍຶດເອົາອຳນາດ, (ແລະ ນີ້ເປັນແຜນການ ລັບ, ແລະ
ການມົ້ວສຸມລັບຂອງພວກເຂົາ) ຂ້າໃຊ້ຂອງຮີລາມັນເວົ້າກັບຄິດ
ຄູເມັນວ່າ: ໃຫ້ພວກເຮົາໄປຫາບັນລັງຕັດສິນນຳກັນເທາະ.

ງ ບັດນີ້ມັນຈຶ່ງເຮັດໃຫ້ຄິດຄູເມັນພໍໃຈຫລາຍທີ່ສຸດ, ເພາະຄິດ
ວ່າລາວຈະໄດ້ຮັບຜົນສຳເລັດຕາມແຜນການທີ່ວາງໄວ້; ແຕ່ຈົ່ງ
ເບິ່ງ, ໃນຂະນະທີ່ພວກເຂົາກຳລັງເດີນທາງໄປຫາບັນລັງຕັດສິນ
ຢູ່ນັ້ນ, ຂ້າໃຊ້ຂອງຮີລາມັນໄດ້ແທງຄິດຄູເມັນທະລຸຫົວໃຈ ຈົນ
ລາວໄດ້ລົ້ມຕາຍຄາທີ່ໂດຍບໍ່ມີສຽງຮ້ອງຄາງເລີຍ. ແລະ ລາວໄດ້
ແລ່ນໄປບອກຮີລາມັນເຖິງເລື່ອງທັງໝົດທີ່ລາວໄດ້ເຫັນ, ແລະ
ໄດ້ຍິນ, ແລະ ໄດ້ເຮັດ.

ຈ ແລະ ເຫດການໄດ້ບັງເກີດຂຶ້ນຄື ຮີລາມັນຈຶ່ງໄດ້ສົ່ງຄົນໄປຈັບ
ພວກໂຈນ ແລະ ກຸ່ມຄາດຕະກອນລັບພວກນີ້, ເພື່ອພວກເຂົາ
ຈະໄດ້ຖືກປະຫານຊີວິດຕາມກົດໝາຍ.

ສ ແຕ່ຈົ່ງເບິ່ງ, ເວລາແກດີອານທັນຮູ້ວ່າຄິດຄູເມັນບໍ່ໄດ້ກັບຄືນ
ມາ ລາວກໍຢ້ານວ່າຕົວເອງຈະຖືກທຳລາຍ; ສະນັ້ນ ລາວຈຶ່ງສັ່ງ
ໃຫ້ພັກພວກຂອງລາວຕິດຕາມລາວໄປ. ແລະ ພວກເຂົາໄດ້ໜີ
ອອກຈາກແຜ່ນດິນໂດຍທາງລັບເຂົ້າໄປໃນຖິ່ນແຫ້ງແລ້ງ
ກັນດານ; ແລະ ເວລາທີ່ຮີລາມັນສົ່ງຄົນໄປຈັບພວກເຂົາ, ຈຶ່ງບໍ່
ເຫັນພວກເຂົາໃນບ່ອນໃດເລີຍ.

ຊ ແລະ ເລື່ອງລາວຂອງແກດີອານທັນຈະຖືກເວົ້າເຖິງອີກ
ຫລັງຈາກນີ້ໄປ. ແລະ ປີທີສີ່ສິບສອງແຫ່ງການປົກຄອງຂອງຜູ້
ຕັດສິນດູແລຜູ້ຄົນຂອງນີໄຟໄດ້ສິ້ນສຸດລົງດັ່ງນີ້.

ຌ ແລະ ຈົ່ງເບິ່ງ, ໃນຕອນສຸດທ້າຍຂອງໜັງສືເຫລັ້ມນີ້ ທ່ານຈະ
ເຫັນໄດ້ວ່າ ແກດີອານທັນຜູ້ນີ້ໄດ້ເປັນຕົ້ນເຫດຂອງການໂຄ່ນ
ລົ້ມ, ແທ້ຈິງແລ້ວ, ມັນເກືອບຈະເປັນການທຳລາຍຜູ້ຄົນຂອງນີ
ໄຟໃຫ້ສູນສິ້ນໄປ.

ຍ ຈົ່ງເບິ່ງ ຂ້າພະເຈົ້າບໍ່ໄດ້ໝາຍຄວາມວ່າ ມັນແມ່ນຕອນ
ສຸດທ້າຍຂອງໜັງສືຮີລາມັນ, ແຕ່ຂ້າພະເຈົ້າໝາຍເຖິງຕອນ
ສຸດທ້າຍຂອງໜັງສືນີໄຟ, ຊຶ່ງຂ້າພະເຈົ້າໄດ້ເອົາເລື່ອງລາວ
ທັງໝົດມາຂຽນໄວ້.

And when the servant of Helaman had known all the heart of Kishkumen, and how that it was his object to murder, and also that it was the object of all those who belonged to his band to murder, and to rob, and to gain power, (and this was their secret plan, and their combination) the servant of Helaman said unto Kishkumen: Let us go forth unto the judgment-seat.

Now this did please Kishkumen exceedingly, for he did suppose that he should accomplish his design; but behold, the servant of Helaman, as they were going forth unto the judgment-seat, did stab Kishkumen even to the heart, that he fell dead without a groan. And he ran and told Helaman all the things which he had seen, and heard, and done.

And it came to pass that Helaman did send forth to take this band of robbers and secret murderers, that they might be executed according to the law.

But behold, when Gadianton had found that Kishkumen did not return he feared lest that he should be destroyed; therefore he caused that his band should follow him. And they took their flight out of the land, by a secret way, into the wilderness; and thus when Helaman sent forth to take them they could nowhere be found.

And more of this Gadianton shall be spoken hereafter. And thus ended the forty and second year of the reign of the judges over the people of Nephi.

And behold, in the end of this book ye shall see that this Gadianton did prove the overthrow, yea, almost the entire destruction of the people of Nephi.

Behold I do not mean the end of the book of Helaman, but I mean the end of the book of Nephi, from which I have taken all the account which I have written.

ຮີລາມັນ ມ

Helaman 3

ມ ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີສີ່ສິບສາມແຫ່ງການ ປົກຄອງຂອງຜູ້ຕັດສິນ, ມັນບໍ່ມີການຂັດແຍ້ງກັນເລີຍໃນບັນດາ ຜູ້ຄົນຂອງນີໄຟຍົກເວັ້ນແຕ່ມີຄວາມທະນົງຕົວເລັກໜ້ອຍໃນ ສາດສະໜາຈັກ, ຊຶ່ງພາໃຫ້ເກີດການແຕກແຍກກັນເລັກໜ້ອຍ ໃນບັນດາຜູ້ຄົນ, ຊຶ່ງມັນໄດ້ຢຸດຕິລົງໃນທ້າຍປີທີສີ່ສິບສາມ.

And now it came to pass in the forty and third year of the reign of the judges, there was no contention among the people of Nephi save it were a little pride which was in the church, which did cause some little dissensions among the people, which affairs were settled in the ending of the forty and third year.

ຄ ແລະ ມັນບໍ່ມີການຂັດແຍ້ງກັນເລີຍໃນບັນດາຜູ້ຄົນໃນປີທີສີ່ ສິບສີ່; ແລະ ທັງບໍ່ມີການຂັດແຍ້ງກັນຫລາຍໃນປີທີສີ່ສິບຫ້າ.

And there was no contention among the people in the forty and fourth year; neither was there much contention in the forty and fifth year.

ມ ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີສີ່ສິບຫົກ, ແທ້ຈິງ ແລ້ວ, ມັນໄດ້ມີການຂັດແຍ້ງກັນຂຶ້ນຫລາຍພໍສົມຄວນ ແລະ ມີການແຕກແຍກກັນຫລາຍ; ຈຶ່ງເປັນເຫດໃຫ້ຜູ້ຄົນຈຳນວນ ຫລວງຫລາຍອອກຈາກແຜ່ນດິນເຊຣາເຮັມລາໄປ, ແລະ ໄດ້ ອອກໄປຫາແຜ່ນດິນ ທາງເໜືອ ເພື່ອຈະໄດ້ເອົາແຜ່ນດິນພາກ ນັ້ນເປັນມູນມໍລະດົກ.

And it came to pass in the forty and sixth, yea, there was much contention and many dissensions; in the which there were an exceedingly great many who departed out of the land of Zarahemla, and went forth unto the land northward to inherit the land.

ຫ ແລະ ພວກເຂົາໄດ້ເດີນທາງໄປເປັນໄລຍະໄກທີ່ສຸດ, ເຖິງ ຂະໜາດທີ່ພວກເຂົາມາຮອດແມ່ນ້ຳອັນ ກວ້າງໃຫຍ່ ແລະ ແມ່ ນ້ຳຫລາຍສາຍ.

And they did travel to an exceedingly great distance, insomuch that they came to large bodies of water and many rivers.

ຫ ແທ້ຈິງແລ້ວ, ພວກເຂົາໄດ້ກະຈັດກະຈາຍກັນອອກໄປທົ່ວ ແຜ່ນດິນພາກນັ້ນ, ແລະ ໄດ້ເຂົ້າໄປເອົາທີ່ດິນສ່ວນຕ່າງໆທີ່ຍັງ ບໍ່ມີເຈົ້າຂອງ ຊຶ່ງຖືກປະໄວ້ໃຫ້ຮົກຮ້າງ ແລະ ປາດສະຈາກ ຕົ້ນໄມ້, ຍ້ອນວ່າມັນເຄີຍມີຜູ້ອາໄສເປັນຈຳນວນຫລວງຫລາຍ ຢູ່ໃນແຜ່ນດິນນີ້ມາກ່ອນແລ້ວ.

Yea, and even they did spread forth into all parts of the land, into whatever parts it had not been rendered desolate and without timber, because of the many inhabitants who had before inherited the land.

ຫ ແລະ ບັດນີ້ແຜ່ນດິນນີ້ບໍ່ໄດ້ຮົກຮ້າງອີກແລ້ວ, ເວັ້ນເສຍແຕ່ ມັນບໍ່ມີຕົ້ນໄມ້; ຍ້ອນວ່າ ຄວາມພິນາດອັນໃຫຍ່ຫລວງຂອງ ຜູ້ຄົນຜູ້ເຄີຍອາໄສຢູ່ໃນແຜ່ນດິນນີ້ມາກ່ອນ ມັນຈຶ່ງຖືກເອີ້ນວ່າ ແຜ່ນດິນຮ້າງ.

And now no part of the land was desolate, save it were for timber; but because of the greatness of the destruction of the people who had before inhabited the land it was called desolate.

ກ ແລະ ມັນມີຕົ້ນໄມ້ຢູ່ພຽງເລັກໜ້ອຍໃນແຜ່ນດິນ, ເຖິງ ຢ່າງໃດກໍຕາມ ຜູ້ຄົນທີ່ເຂົ້າມາຢູ່ໃນແຜ່ນດິນນີ້ເປັນຜູ້ທີ່ ຊຳນິຊຳນານໃນການເຮັດປູນຊີມັງ; ສະນັ້ນ ພວກເຂົາຈຶ່ງໄດ້ສ້າງ ເຮືອນຊານຂຶ້ນດ້ວຍປູນຊີມັງ, ເພື່ອເປັນບ່ອນພັກພາອາໄສ.

And there being but little timber upon the face of the land, nevertheless the people who went forth became exceedingly expert in the working of cement; therefore they did build houses of cement, in the which they did dwell.

ຖ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ເພີ່ມທະວີຂຶ້ນ, ແລະ ຂະຫຍາຍອອກໄປ ແລະ ໄດ້ແຜ່ຂະຫຍາຍອອກໄປຈາກ ແຜ່ນດິນທາງໃຕ້ ເຖິງແຜ່ນດິນທາງເໜືອ, ແລະ ພວກເຂົາເລີ່ມ ແຜ່ຂະຫຍາຍ ເຖິງຂະໜາດທີ່ພວກເຂົາເລີ່ມຕົ້ນປົກຄຸມທົ່ວໜ້າ ແຜ່ນດິນໂລກ, ຈາກທະເລທາງໃຕ້ເຖິງທະເລທາງເໜືອ, ຈາກ ທະເລທາງຕາເວັນຕົກເຖິງທະເລທາງຕາເວັນອອກ.

And it came to pass that they did multiply and spread, and did go forth from the land southward to the land northward, and did spread insomuch that they began to cover the face of the whole earth, from the sea south to the sea north, from the sea west to the sea east.

ນ ແລະ ຜູ້ຄົນຜູ້ທີ່ຢູ່ໃນແຜ່ນດິນທາງເໜືອໄດ້ອາໄສຢູ່ໃນຜ້າ
ເຕັນ, ແລະ ເຮືອນຊານທີ່ເຮັດດ້ວຍປູນຊີມັງ, ແລະ ພວກເຂົາໄດ້
ປ່ອຍໃຫ້ຕົ້ນໄມ້ບໍ່ວ່າຊະນິດໃດໆກໍຕາມເກີບໂຕຂຶ້ນ ເພື່ອວ່າພວກ
ເຂົາຈະໄດ້ມີໄມ້ໄວ້ສ້າງເຮືອນຊານຂອງພວກເຂົາເວລາມັນໃຫຍ່
ຂຶ້ນມາ, ແທ້ຈິງແລ້ວ, ເພື່ອພວກເຂົາຈະໄດ້ສ້າງບ້ານເມືອງຂອງ
ພວກເຂົາ, ແລະ ພຣະວິຫານຂອງພວກເຂົາ, ແລະ ບ່ອນລີ້ໄພ
ຂອງພວກເຂົາ, ແລະ ທຳມະສາລາຂອງພວກເຂົາ, ແລະ ອາ
ຄານຕ່າງໆຂອງພວກເຂົາຂຶ້ນ.

And the people who were in the land northward did dwell in tents, and in houses of cement, and they did suffer whatsoever tree should spring up upon the face of the land that it should grow up, that in time they might have timber to build their houses, yea, their cities, and their temples, and their synagogues, and their sanctuaries, and all manner of their buildings.

ນ ແລະ ເຫດການໄດ້ບັງເກີດຂຶ້ນເມື່ອງຈາກວ່າຕົ້ນໄມ້ໃນ
ແຜ່ນດິນທາງເໜືອຫາຍາກຫລາຍ, ຜູ້ຄົນຢູ່ທາງໃຕ້ຈຶ່ງໄດ້ສົ່ງ
ໄມ້ຢ່າງຫລວງຫລາຍຂຶ້ນໄປ ທາງເຮືອ.

And it came to pass as timber was exceedingly scarce in the land northward, they did send forth much by the way of shipping.

ນ ດັ່ງນັ້ນ ພວກເຂົາຈຶ່ງສາມາດຊ່ວຍຜູ້ຄົນຜູ້ອາໄສຢູ່ໃນ
ແຜ່ນດິນທາງເໜືອສ້າງບ້ານເມືອງຂຶ້ນ, ທັງເຮັດດ້ວຍໄມ້ ແລະ
ດ້ວຍປູນຊີມັງ.

And thus they did enable the people in the land northward that they might build many cities, both of wood and of cement.

ນ ແລະ ເຫດການໄດ້ບັງເກີດຂຶ້ນຄື ມີ ຜູ້ຄົນຂອງອຳໂມນ
ຈຳນວນຫລາຍຊຶ່ງເປັນຊາວເລມັນໂດຍກຳເນີດ, ໄດ້ຂຶ້ນໄປຫາ
ແຜ່ນດິນນີ້ຄືກັນ.

And it came to pass that there were many of the people of Ammon, who were Lamanites by birth, did also go forth into this land.

ນ ແລະ ບັດນີ້ມີບັນທຶກຫລາຍສະບັບທີ່ຫລາຍຄົນໃນຜູ້ຄົນ
ພວກນີ້ຂຽນໄວ້ເຖິງການກະທຳຂອງຜູ້ຄົນພວກນີ້, ຊຶ່ງເປັນ
ເລື່ອງທີ່ຍືດຍາວກ່ຽວກັບພວກເຂົາເອງ.

And now there are many records kept of the proceedings of this people, by many of this people, which are particular and very large, concerning them.

ນ ແຕ່ຈົ່ງເບິ່ງ, ຂ້າພະເຈົ້າໄດ້ກ່າວໄວ້ພຽງແຕ່ໜຶ່ງສ່ວນຮ້ອຍ
ເທົ່ານັ້ນຂອງການກະທຳຂອງຜູ້ຄົນພວກນີ້, ແທ້ຈິງແລ້ວ,
ເລື່ອງລາວຂອງຊາວເລມັນ ແລະ ເລື່ອງລາວຂອງຊາວນີໄຟ,
ແລະ ສົງຄາມຂອງພວກເຂົາ, ແລະ ການຂັດແຍ້ງຂອງພວກ
ເຂົາ, ແລະ ການແຕກແຍກຂອງພວກເຂົາ, ແລະ ການສັ່ງສອນ
ຂອງພວກເຂົາ, ແລະ ການທຳນາຍຂອງພວກເຂົາ, ແລະ ການ
ຂົນສົ່ງທາງນ້ຳຂອງພວກເຂົາ ແລະ ການສ້າງເຮືອໃຫຍ່ຂອງ
ພວກເຂົາ, ແລະ ການສ້າງ ພຣະວິຫານຂອງພວກເຂົາ, ແລະ
ການສ້າງບ່ອນລີ້ໄພ ແລະ ທຳມະສາລາຂອງພວກເຂົາ, ແລະ
ຄວາມຊອບທຳຂອງພວກເຂົາ, ແລະ ຄວາມຊົ່ວຮ້າຍຂອງພວກ
ເຂົາ, ແລະ ການຄາດຕະກຳຂອງພວກເຂົາ, ແລະ ການລັກ
ຂະໂມຍຂອງພວກເຂົາ, ແລະ ການປຸ້ນຈີ້ຂອງພວກເຂົາ, ແລະ
ຄວາມໜ້າກຽດຊັງ ແລະ ການໂສເພນີຂອງພວກເຂົາ, ບໍ່
ສາມາດຈະເອົາມາບັນຈຸໄວ້ໃນໜັງສືເຫລັ້ມນີ້ໄດ້.

But behold, a hundredth part of the proceedings of this people, yea, the account of the Lamanites and of the Nephites, and their wars, and contentions, and dissensions, and their preaching, and their prophecies, and their shipping and their building of ships, and their building of temples, and of synagogues and their sanctuaries, and their righteousness, and their wickedness, and their murders, and their robbings, and their plundering, and all manner of abominations and whoredoms, cannot be contained in this work.

ນ ແຕ່ຈົ່ງເບິ່ງ, ມັນມີໜັງສືຫລາຍເຫລັ້ມ ແລະ ບັນທຶກຫລາຍ
ສະບັບຂອງທຸກແບບ, ແລະ ສ່ວນໃຫຍ່ນັ້ນແມ່ນຊາວນີໄຟເປັນ
ຜູ້ຮັກສາໄວ້.

But behold, there are many books and many records of every kind, and they have been kept chiefly by the Nephites.

ແລະ ຊາວນີໄຟໄດ້ມອບສິ່ງເຫລົ່ານີ້ ຕໍ່ໆກັນໄປຈາກຄົນລຸ້ນ
ໜຶ່ງຫາຄົນອີກລຸ້ນໜຶ່ງ, ຈົນວ່າມາຮອດເວລາພວກເຂົາຕົກໄປສູ່
ການລ່ວງລະເມີດ ແລະ ມີການຄາດຕະກຳ, ການປຸ້ນຈີ້, ແລະ
ການຕາມລ່າ, ແລະ ການຂັບໄລ່, ແລະ ການຂ້າຟັນ, ແລະ ການ
ແຕກກະຈັດກະຈາຍໄປທົ່ວໜ້າແຜ່ນດິນໂລກ, ແລະ ປະປົນເຂົ້າ
ກັບຊາວເລມັນ ຈົນວ່າພວກເຂົາບໍ່ໄດ້ຖືກເອີ້ນว่าชาวนีไฟ ອີກ
ຕໍ່ໄປ, ກາຍເປັນຄົນຊົ່ວ, ແລະ ປ່າເຖື່ອນ, ແລະ ຮ້າຍກາດ, ແທ້
ຈິງແລ້ວ, ໄດ້ກາຍເປັນຊາວເລມັນ.

ແລະ ບັດນີ້ຂ້າພະເຈົ້າຈະກັບມາເວົ້າເຖິງເລື່ອງຂອງ
ຂ້າພະເຈົ້າອີກ; ສະນັ້ນ, ສິ່ງທີ່ຂ້າພະເຈົ້າເວົ້າມານີ້ໄດ້ເກີດຂຶ້ນ
ແລ້ວ ຫລັງຈາກມີການຂັດແຍ້ງ, ແລະ ມີຄວາມຫຍຸ້ງຍາກ, ແລະ
ສົງຄາມ, ແລະ ການແຕກແຍກຢ່າງໃຫຍ່ຫລວງໃນບັນດາຜູ້ຄົນ
ຂອງນີໄຟ.

ປີທີສີ່ສິບຫົກແຫ່ງການປົກຄອງຂອງຜູ້ຕັດສິນໄດ້ສິ້ນສຸດ
ລົງ;

ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນຍັງມີການຂັດແຍ້ງອັນ
ໃຫຍ່ຫລວງເກີດຂຶ້ນໃນແຜ່ນດິນຢູ່, ແທ້ຈິງແລ້ວ, ເຖິງແມ່ນໃນ
ປີທີສີ່ສິບເຈັດ ແລະ ປີທີສີ່ສິບແປດນຳອີກ.

ເຖິງຢ່າງໃດກໍຕາມ ຮີລາມັນຍັງໄດ້ເຮັດໜ້າທີ່ຢູ່ເທິງບັນລັງ
ຕັດສິນດ້ວຍຄວາມຍຸດຕິທຳ ແລະ ຄວາມຊອບທຳ; ແທ້ຈິງແລ້ວ,
ເພີ່ນໄດ້ຍຶດຖືທີ່ຈະຮັກສາຂໍ້ກຳນົດ, ແລະ ການພິພາກສາ, ແລະ
ພຣະບັນຍັດຂອງພຣະເຈົ້າ; ແລະ ເພີ່ນໄດ້ເຮັດທຸກສິ່ງທຸກຢ່າງ
ທີ່ຖືກຕ້ອງໃນສາຍພຣະເນດຂອງພຣະເຈົ້າຕະຫລອດເວລາ;
ແລະ ເພີ່ນໄດ້ໃຊ້ຊີວິດຕາມແບບຢ່າງຂອງບິດາຂອງເພີ່ນ, ເຖິງ
ຂະໜາດທີ່ເພີ່ນໄດ້ຮຸ່ງເຮືອງຢູ່ໃນແຜ່ນດິນ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ເພີ່ນມີລູກຊາຍສອງຄົນ.
ເພີ່ນໄດ້ຕັ້ງຊື່ໃຫ້ລູກກົກว่า ນີໄຟ, ແລະ ຜູ້ຫລ້ານ້ອງว่า ລີໄຮ. ແລະ
ພວກເຂົາທັງສອງເລີ່ມເຕີບໂຕຂຶ້ນໃນທາງຂອງພຣະຜູ້ເປັນ
ເຈົ້າ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ສົງຄາມ ແລະ ການຂັດແຍ້ງ
ກັນເລີ່ມຢຸດລົງແດ່ແລ້ວ, ໃນລະດັບໜ້ອຍໜຶ່ງ, ໃນບັນດາຜູ້ຄົນ
ຂອງນີໄຟ, ໃນທ້າຍປີທີສີ່ສິບແປດແຫ່ງການປົກຄອງຂອງຜູ້
ຕັດສິນດູແລຜູ້ຄົນຂອງນີໄຟ.

ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີສີ່ສິບເກົ້າແຫ່ງການ
ປົກຄອງຂອງຜູ້ຕັດສິນ, ມັນໄດ້ມີສັນຕິສຸກຕໍ່ເນື່ອງກັນໄປໃນ
ແຜ່ນດິນ, ນອກຈາກການມົ້ວສຸມລັບ ຊຶ່ງໂຈນ ແກດີອານທັນ
ຈັດຕັ້ງຂຶ້ນໃນພາກສ່ວນຕ່າງໆຂອງແຜ່ນດິນທີ່ມີຜູ້ຄົນພັກພາ
ອາໄສຢູ່, ຊຶ່ງໃນເວລານັ້ນ ຜູ້ທີ່ເປັນຜູ້ນຳຂອງຝ່ າ ຍ ປົ ກ ຄ ອ ງ ບໍ່
ຮູ້ຈັກຫຍັງເລີຍ; ສະນັ້ນ ພວກເຂົາຈຶ່ງບໍ່ໄດ້ຖືກທຳລາຍໄປຈາກ
ແຜ່ນດິນ.

And they have been handed down from one generation to another by the Nephites, even until they have fallen into transgression and have been murdered, plundered, and hunted, and driven forth, and slain, and scattered upon the face of the earth, and mixed with the Lamanites until they are no more called the Nephites, becoming wicked, and wild, and ferocious, yea, even becoming Lamanites.

And now I return again to mine account; therefore, what I have spoken had passed after there had been great contentions, and disturbances, and wars, and dissensions, among the people of Nephi.

The forty and sixth year of the reign of the judges ended;

And it came to pass that there was still great contention in the land, yea, even in the forty and seventh year, and also in the forty and eighth year.

Nevertheless Helaman did fill the judgment-seat with justice and equity; yea, he did observe to keep the statutes, and the judgments, and the commandments of God; and he did do that which was right in the sight of God continually; and he did walk after the ways of his father, insomuch that he did prosper in the land.

And it came to pass that he had two sons. He gave unto the eldest the name of Nephi, and unto the youngest, the name of Lehi. And they began to grow up unto the Lord.

And it came to pass that the wars and contentions began to cease, in a small degree, among the people of the Nephites, in the latter end of the forty and eighth year of the reign of the judges over the people of Nephi.

And it came to pass in the forty and ninth year of the reign of the judges, there was continual peace established in the land, all save it were the secret combinations which Gadianton the robber had established in the more settled parts of the land, which at that time were not known unto those who were at the head of government; therefore they were not destroyed out of the land.

๘๔ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີດຽວກັນນີ້ ມັນມີຄວາມ
ຈະເລີນຮຸ່ງເຮືອງຫລາຍທີ່ສຸດໃນສາດສະໜາຈັກ, ເຖິງຂະໜາດ
ທີ່ມີຫລາຍພັນຄົນເຂົ້າມາຮ່ວມສາດສະໜາຈັກ ແລະ ໄດ້ຮັບ
ບັບຕິສະມາໄວ້ກັບການກັບໃຈ.

And it came to pass that in this same year there was exceedingly great prosperity in the church, insomuch that there were thousands who did join themselves unto the church and were baptized unto repentance.

๘๕ ແລະ ຄວາມຈະເລີນຮຸ່ງເຮືອງຂອງສາດສະໜາຈັກນັ້ນ
ກວ້າງຂວາງຫລາຍຂຶ້ນ, ແລະ ພອນຢ່າງຫລວງຫລາຍໄດ້ຖືກ
ຖອກເທລົງມາເທິງຜູ້ຄົນ, ຈົນວ່າມະຫາປະໂລຫິດ ແລະ ຄູສອນ
ເອງແປກໃຈເກີນກວ່າທີ່ຈະຄຳນວນໄດ້.

And so great was the prosperity of the church, and so many the blessings which were poured out upon the people, that even the high priests and the teachers were themselves astonished beyond measure.

๘๖ ແລະ ເຫດການໄດ້ບັງເກີດຂຶ້ນຄື ວຽກງານຂອງພຣະຜູ້ເປັນ
ເຈົ້າໄດ້ຈະເລີນຮຸ່ງເຮືອງຂຶ້ນ ຈົນນຳຄົນຢ່າງຫລວງຫລາຍມາຫາ
ການຮັບບັບຕິສະມາ ແລະ ເປັນອັນໜຶ່ງອັນດຽວກັນກັບ
ສາດສະໜາຈັກຂອງພຣະເຈົ້າ, ແທ້ຈິງແລ້ວ, ເຖິງແມ່ນເປັນ
ຫລາຍໝື່ນຄົນ.

And it came to pass that the work of the Lord did prosper unto the baptizing and uniting to the church of God, many souls, yea, even tens of thousands.

๘๗ ດັ່ງນັ້ນ ພວກເຮົາຈຶ່ງເຫັນໄດ້ວ່າ ພຣະຜູ້ເປັນເຈົ້າເມດຕາປານີ
ຕໍ່ທຸກໆຄົນທີ່ເອີ້ນຫາພຣະນາມອັນສັກສິດຂອງພຣະອົງດ້ວຍ
ຄວາມຈິງໃຈຂອງໃຈເຂົາ.

Thus we may see that the Lord is merciful unto all who will, in the sincerity of their hearts, call upon his holy name.

๘๘ ແທ້ຈິງແລ້ວ, ພວກເຮົາຈຶ່ງເຫັນໄດ້ວ່າ ປະຕູສະຫວັນໄດ້ເປີດ
ໃຫ້ແກ່ ທຸກຄົນຜູ້ທີ່ເຊື່ອໃນພຣະນາມຂອງພຣະເຢຊູຄຣິດຜູ້
ເປັນພຣະບຸດຂອງພຣະເຈົ້າ.

Yea, thus we see that the gate of heaven is open unto all, even to those who will believe on the name of Jesus Christ, who is the Son of God.

๘๙ ແທ້ຈິງແລ້ວ, ພວກເຮົາຈຶ່ງເຫັນໄດ້ວ່າ ຜູ້ໃດກໍຕາມທີ່ຕັ້ງໃຈ
ຍຶດຖື ພຣະຄຳຂອງພຣະເຈົ້າ, ຊຶ່ງ ມີຊີວິດ ແລະ ມີພະລັງ, ຊຶ່ງຈະ
ແຍກເລ່ຫລ່ຽມ ແລະ ບ້ວງ ແລະ ກົນອຸບາຍຂອງມານອອກໄປ,
ແລະ ນຳເອົາຄົນຂອງພຣະຄຣິດໄປໃນທາງຄັບ ແລະ ແຄບ ຂ້າມ
ເຫວເລິກແຫ່ງຄວາມທຸກທໍລະມານອັນເປັນນິດ ຊຶ່ງຕຽມໄວ້ໃຫ້
ກືນຄົນຊົ່ວ—

Yea, we see that whosoever will may lay hold upon the word of God, which is quick and powerful, which shall divide asunder all the cunning and the snares and the wiles of the devil, and lead the man of Christ in a strait and narrow course across that everlasting gulf of misery which is prepared to engulf the wicked—

๙๐ ແລະ ຈະນຳເອົາຈິດວິນຍານຂອງພວກເຂົາມາວາງໄວ້, ແທ້
ຈິງແລ້ວ, ແມ່ນຈິດວິນຍານທີ່ເປັນອະມະຕະຂອງພວກເຂົາມາ
ວາງໄວ້ທາງ ເບື້ອງຂວາພຣະຫັດຂອງພຣະເຈົ້າໃນອານາຈັກ
ສະຫວັນ, ເພື່ອນັ່ງຢູ່ຮ່ວມກັບອັບຣາຮາມ, ແລະ ກັບອີຊາກ,
ແລະ ກັບຢາໂຄບ, ແລະ ກັບບັນພະບຸລຸດຜູ້ບໍລິສຸດທັງຫລາຍ
ຂອງພວກເຮົາເພື່ອຈະບໍ່ອອກໄປອີກ.

And land their souls, yea, their immortal souls, at the right hand of God in the kingdom of heaven, to sit down with Abraham, and Isaac, and with Jacob, and with all our holy fathers, to go no more out.

๙๑ ແລະ ໃນປີນີ້ ມັນຍັງມີຄວາມຊື່ນຊົມຢູ່ໃນແຜ່ນດິນເຊຣາເຮັມ
ລາ, ແລະ ໃນທຸກພາກພື້ນໂດຍອ້ອມຮອບ ເຖິງແມ່ນໃນທົ່ວ
ແຜ່ນດິນທີ່ຊາວນີໄຟເປັນເຈົ້າຂອງ.

And in this year there was continual rejoicing in the land of Zarahemla, and in all the regions round about, even in all the land which was possessed by the Nephites.

๙๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນໄດ້ມີສັນຕິສຸກ ແລະ
ຄວາມຊື່ນຊົມຢ່າງລົ້ນເຫລືອໃນເວລາທີ່ເຫລືອຢູ່ຂອງປີທີສີ່ສິບ
ເກົ້າ; ແທ້ຈິງແລ້ວ, ມັນໄດ້ມີສັນຕິສຸກ ແລະ ຄວາມຜາສຸກ
ຕໍ່ເນື່ອງກັນໄປອີກໃນປີທີຫ້າສິບແຫ່ງການປົກຄອງຂອງຜູ້
ຕັດສິນ.

And it came to pass that there was peace and exceedingly great joy in the remainder of the forty and ninth year; yea, and also there was continual peace and great joy in the fiftieth year of the reign of the judges.

ນ໓ນ ແລະ ໃນປີທີຫ້າສິບເອັດແຫ່ງການປົກຄອງຂອງຜູ້ຕັດສິນກໍ ຍັງມີສັນຕິສຸກຢູ່ ນອກຈາກມີຄວາມທະນົງຕົວຊຶ່ງເລີ່ມເຂົ້າມາໃນ ສາດສະໜາຈັກ—ບໍ່ແມ່ນເຂົ້າມາໃນສາດສະໜາຈັກຂອງ ພຣະເຈົ້າ, ແຕ່ເຂົ້າມາໃນໃຈຂອງຜູ້ທີ່ອ້າງວ່າເປັນຂອງ ສາດສະໜາຈັກຂອງພຣະເຈົ້າ—

And in the fifty and first year of the reign of the judges there was peace also, save it were the pride which began to enter into the church—not into the church of God, but into the hearts of the people who professed to belong to the church of God—

ນ໓ສ ແລະ ພວກເຂົາໄດ້ລະເມີເພີ້ຝັນດ້ວຍ ຄວາມທະນົງຕົວ, ຈົນ ວ່າພວກເຂົາໄດ້ກົດຂີ່ຂົ່ມເຫັງພີ່ນ້ອງຂອງຕົນຫລາຍຄົນ. ບັດນີ້ ນີ້ເປັນຄວາມຊົ່ວອັນໃຫຍ່ຫລວງຊຶ່ງໄດ້ເຮັດໃຫ້ຜູ້ຄົນທີ່ຖ່ອມຕົວ ເປັນຈຳນວນຫລວງຫລາຍຕ້ອງທົນທຸກຕໍ່ການກົດຂີ່ຂົ່ມເຫັງ ນັ້ນ, ແລະ ຕ້ອງລຸຍໄປກັບຄວາມທຸກຢ່າງຫລວງຫລາຍ.

And they were lifted up in pride, even to the persecution of many of their brethren. Now this was a great evil, which did cause the more humble part of the people to suffer great persecutions, and to wade through much affliction.

ນ໓ຫ ເຖິງຢ່າງໃດກໍຕາມ ພວກເຂົາຍັງໄດ້ ຖືສິນອົດເຂົ້າ ແລະ ອະທິຖານຢູ່ເລື້ອຍໆ ແລະ ໄດ້ເຂັ້ມແຂງຂຶ້ນໄປເລື້ອຍໆໃນ ຄວາມ ຖ່ອມຕົວຂອງພວກເຂົາ, ແລະ ໝັ້ນຄົງຂຶ້ນໄປເລື້ອຍໆນຳສັດທາ ໃນພຣະຄຣິດ, ຈົນເຮັດໃຫ້ຈິດວິນຍານຂອງພວກເຂົາເຕັມໄປ ດ້ວຍຄວາມສຸກ ແລະ ຄວາມປອບໃຈ, ແທ້ຈິງແລ້ວ, ຈົນ ຊຳລະ ໃຈຂອງພວກເຂົາ ໃຫ້ບໍລິສຸດ ແລະ ສັກສິດ ຊຶ່ງການຊຳລະໃຫ້ ບໍລິສຸດນັ້ນມີມາຍ້ອນການ ຍອມຖວາຍໃຈຂອງພວກເຂົາແດ່ ພຣະເຈົ້າ.

Nevertheless they did fast and pray oft, and did wax stronger and stronger in their humility, and firmer and firmer in the faith of Christ, unto the filling their souls with joy and consolation, yea, even to the purifying and the sanctification of their hearts, which sanctification cometh because of their yielding their hearts unto God.

ນ໓ຈ ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີຫ້າສິບສອງໄດ້ສິ້ນສຸດ ລົງດ້ວຍສັນຕິສຸກຄືກັນ, ນອກຈາກຄວາມທະນົງຕົວອັນ ໃຫຍ່ຫລວງໄດ້ເຂົ້າເຖິງໃຈຂອງຜູ້ຄົນ; ແລະ ມັນເປັນຍ້ອນ ຄວາມຮັ່ງມີເປັນດີ ແລະ ຄວາມຈະເລີນຮຸ່ງເຮືອງຢ່າງຍິ່ງໃນ ແຜ່ນດິນຂອງພວກເຂົາ; ແລະ ນັບມື້ນັບວັນມັນໄດ້ເຕີບໂຕຂຶ້ນ ຢູ່ໃນພວກເຂົາ.

And it came to pass that the fifty and second year ended in peace also, save it were the exceedingly great pride which had gotten into the hearts of the people; and it was because of their exceedingly great riches and their prosperity in the land; and it did grow upon them from day to day.

ນ໓ເ ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີຫ້າສິບສາມແຫ່ງການ ປົກຄອງຂອງຜູ້ຕັດສິນ, ຮີລາມັນໄດ້ສິ້ນຊີວິດໄປ, ແລະ ລູກຊາຍ ກົກຂອງເພີ່ນ ນີໄຟ ໄດ້ຂຶ້ນເປັນຜູ້ຕັດສິນແທນ. ແລະ ເຫດການ ໄດ້ບັງເກີດຂຶ້ນຄື ເພີ່ນໄດ້ເຮັດໜ້າທີ່ໃນບັນລັງຕັດສິນດ້ວຍ ຄວາມຍຸດຕິທຳ ແລະ ຄວາມທ່ຽງທຳ; ແທ້ຈິງແລ້ວ, ເພີ່ນໄດ້ ຮັກສາພຣະບັນຍັດຂອງພຣະເຈົ້າ, ແລະ ໄດ້ເດີນໃນເສັ້ນທາງ ຂອງບິດາຂອງເພີ່ນ.

And it came to pass in the fifty and third year of the reign of the judges, Helaman died, and his eldest son Nephi began to reign in his stead. And it came to pass that he did fill the judgment-seat with justice and equity; yea, he did keep the commandments of God, and did walk in the ways of his father.

ຮີລາມັນ ๔

๑ ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີຫ້າສິບສີ່ຄື ມັນມີການ
ແຕກແຍກຂຶ້ນຫລາຍໃນສາດສະໜາຈັກ, ແລະ ມີ ການຂັດແຍ້ງ
ກັນໃນບັນດາຜູ້ຄົນນຳອີກ, ເຖິງຂະໜາດທີ່ມີການນອງເລືອດ
ຢ່າງໜັກເກີດຂຶ້ນ.

๒ ແລະ ຝ່າຍພວກກະບົດບາງສ່ວນຖືກຂ້າ ແລະ ຖືກຂັບໄລ່
ອອກໄປຈາກແຜ່ນດິນ, ແລະ ພວກເຂົາໄດ້ໄປຫາກະສັດຂອງ
ຊາວເລມັນ.

๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຍຸຍົງຊາວເລມັນ
ໃຫ້ມາເຮັດເສິກກັບຊາວນີໄຟ; ແຕ່ຈົ່ງເບິ່ງ, ຊາວເລມັນມີຄວາມ
ຢ້ານກົວຫລາຍທີ່ສຸດ, ເຖິງຂະໜາດທີ່ພວກເຂົາບໍ່ຍອມເຊື່ອຟັງ
ຄຳເວົ້າຂອງພວກທີ່ແຍກອອກໄປນັ້ນ.

๔ ແຕ່ເຫດການໄດ້ບັງເກີດຂຶ້ນໃນປີທີຫ້າສິບຫົກແຫ່ງການ
ປົກຄອງຂອງຜູ້ຕັດສິນ, ມັນໄດ້ມີ ຜູ້ຄົນຜູ້ທີ່ແຍກອອກຈາກຊາວ
ນີໄຟໄປຫາຊາວເລມັນ; ແລະ ພວກເຂົາໄດ້ຮັບຄວາມສຳເລັດໃນ
ການຍຸຍົງໃຫ້ຜູ້ອື່ນຄຽດແຄ້ນໃຫ້ຊາວນີໄຟ; ແລະ ພວກເຂົາໄດ້
ຕຽມເຮັດເສິກຕະຫລອດປີ.

๕ ແລະ ໃນປີທີຫ້າສິບເຈັດ ພວກເຂົາໄດ້ຍົກທັບລົງມາສູ້ຮົບກັບ
ຊາວນີໄຟ, ແລະ ພວກເຂົາໄດ້ເລີ່ມວຽກງານແຫ່ງຄວາມຕາຍ;
ແທ້ຈິງແລ້ວ, ເຖິງຂະໜາດທີ່ໃນປີທີຫ້າສິບແປດແຫ່ງການ
ປົກຄອງຂອງຜູ້ຕັດສິນ ພວກເຂົາໄດ້ຮັບຄວາມສຳເລັດໃນການ
ເຂົ້າຄອບຄອງແຜ່ນດິນເຊຣາເຮັມລາ; ແທ້ຈິງແລ້ວ, ແລະ
ແຜ່ນດິນທັງໝົດລວມທັງແຜ່ນດິນທີ່ຢູ່ໃກ້ກັບແຜ່ນດິນອຸດົມ
ສົມບູນ.

๖ ແລະ ຊາວນີໄຟພ້ອມທັງກອງທັບຂອງ�โมโรไนธาຖືກ
ຂັບໄລ່ເຂົ້າໄປໃນແຜ່ນດິນອຸດົມສົມບູນ;

๗ ແລະ ບ່ອນນັ້ນຊາວນີໄຟໄດ້ສ້າງຄ້າຍຂຶ້ນເພື່ອຕ້ານທານຊາວ
ເລມັນ, ຈາກທະເລທາງຕາເວັນຕົກຈົນເຖິງທາງຕາເວັນອອກ;
ຊຶ່ງເປັນການເດີນທາງມື້ໜຶ່ງສຳລັບຊາວນີໄຟ, ຕາມເສັ້ນທາງ
ຊຶ່ງພວກເຂົາໄດ້ເສີມກຳລັງ ແລະ ວາງກຳລັງທັບຂອງພວກເຂົາ
ໄວ້ເພື່ອປ້ອງກັນປະເທດຊາດຂອງພວກເຂົາໃນທາງເໜືອ.

๘ ແລະ ພວກທີ່ແຍກອອກໄປຈາກຊາວນີໄຟນັ້ນໄດ້ຮັບຄວາມ
ຊ່ວຍເຫລືອຈາກກອງທັບອັນມີກຳລັງຢ່າງຫລວງຫລາຍຈາກ
ຊາວເລມັນ, ດັ່ງນັ້ນ ພວກເຂົາຈຶ່ງໄດ້ຍຶດເອົາແຜ່ນດິນຂອງຊາວ
ນີໄຟທີ່ຢູ່ທາງໃຕ້ໄປໝົດ. ແລະ ທັງໝົດນີ້ເກີດຂຶ້ນໃນປີທີ
ຫ້າສິບແປດ ແລະ ປີຫ້າສິບເກົ້າແຫ່ງການປົກຄອງຂອງຜູ້
ຕັດສິນ.

Helaman 4

And it came to pass in the fifty and fourth year there were many dissensions in the church, and there was also a contention among the people, insomuch that there was much bloodshed.

And the rebellious part were slain and driven out of the land, and they did go unto the king of the Lamanites.

And it came to pass that they did endeavor to stir up the Lamanites to war against the Nephites; but behold, the Lamanites were exceedingly afraid, insomuch that they would not hearken to the words of those dissenters.

But it came to pass in the fifty and sixth year of the reign of the judges, there were dissenters who went up from the Nephites unto the Lamanites; and they succeeded with those others in stirring them up to anger against the Nephites; and they were all that year preparing for war.

And in the fifty and seventh year they did come down against the Nephites to battle, and they did commence the work of death; yea, insomuch that in the fifty and eighth year of the reign of the judges they succeeded in obtaining possession of the land of Zarahemla; yea, and also all the lands, even unto the land which was near the land Bountiful.

And the Nephites and the armies of Moronihah were driven even into the land of Bountiful;

And there they did fortify against the Lamanites, from the west sea, even unto the east; it being a day's journey for a Nephite, on the line which they had fortified and stationed their armies to defend their north country.

And thus those dissenters of the Nephites, with the help of a numerous army of the Lamanites, had obtained all the possession of the Nephites which was in the land southward. And all this was done in the fifty and eighth and ninth years of the reign of the judges.

ຈ ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີຫົກສິບແຫ່ງການ ປົກຄອງຂອງຜູ້ຕັດສິນ, โมโรไนธา ແລະ ກຳລັງຂອງເພິ່ນໄດ້ ຮັບຄວາມສຳເລັດໃນການຍຶດເອົາແຜ່ນດິນພາກສ່ວນຕ່າງໆຄືນ ມາ; ແທ້ຈິງແລ້ວ, ພວກເຂົາໄດ້ຍຶດເອົາຫລາຍຫົວເມືອງຊຶ່ງຕົກ ຢູ່ໃນກຳມືຂອງຊາວເລມັນຄືນມາ.

ຈ And it came to pass in the sixtieth year of the reign of the judges, Moronihah did succeed with his armies in obtaining many parts of the land; yea, they regained many cities which had fallen into the hands of the Lamanites.

ຈ ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີຫົກສິບເອັດແຫ່ງການ ປົກຄອງຂອງຜູ້ຕັດສິນ ພວກເຂົາໄດ້ຮັບຄວາມສຳເລັດໃນການ ຍຶດແຜ່ນດິນ ຈົນວ່າພວກເຂົາໄດ້ຍຶດເອົາເຄິ່ງໜຶ່ງຂອງແຜ່ນດິນ ທັງໝົດທີ່ເສຍໄປນັ້ນຄືນມາ.

And it came to pass in the sixty and first year of the reign of the judges they succeeded in regaining even the half of all their possessions.

ຈ ບັດນີ້ການສູນເສຍຢ່າງຫລວງຫລາຍຂອງຊາວນີໄຟເທື່ອນີ້ ແລະ ການຂ້າຟັນຍິ່ງໃຫຍ່ທີ່ໄດ້ເກີດຂຶ້ນໃນບັນດາພວກເຂົາ ຊຶ່ງ ມັນຈະບໍ່ເກີດຂຶ້ນເລີຍຖ້າຫາກມັນບໍ່ເປັນຍ້ອນຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງພວກເຂົາ ຊຶ່ງມີຢູ່ໃນບັນດາພວກ ເຂົາເອງ; ແທ້ຈິງແລ້ວ, ມັນຢູ່ໃນບັນດາຜູ້ຄົນທີ່ອ້າງຕົນເອງ ວ່າເປັນຂອງສາດສະໜາจักຂອງພຣະເจ้า.

Now this great loss of the Nephites, and the great slaughter which was among them, would not have happened had it not been for their wickedness and their abomination which was among them; yea, and it was among those also who professed to belong to the church of God.

ຈ ແລະ ມັນເປັນຍ້ອນ ຄວາມທະນົງໃຈຂອງພວກເຂົາ, ເປັນ ຍ້ອນ ຄວາມຮັ່ງມີເປັນດີຢ່າງຍິ່ງຂອງພວກເຂົາ, ແທ້ຈິງແລ້ວ, ມັນເປັນຍ້ອນການກົດຂີ່ຂົ່ມເຫັງຂອງພວກເຂົາທີ່ມີຕໍ່ຄົນ ທຸກຍາກລຳບາກ, ກັກກັນອາຫານຈາກຄົນອຶດຫິວ, ບໍ່ມອບ ເຄື່ອງນຸ່ງຫົ່ມໃຫ້ຜູ້ທີ່ເປືອຍເປົ່າ, ແລະ ຕົບໜ້າພີ່ນ້ອງຂອງຕົນ ຜູ້ທີ່ຖ່ອມຕົວ, ເວົ້າເຍາະເຍີ້ຍສິ່ງທີ່ສັກສິດ, ປະຕິເສດວິນຍານ ແຫ່ງການທຳນາຍ ແລະ ການເປີດເຜີຍ, ກໍ່ການຄາດຕະກຳ, ປຸ້ນຈີ້, ເວົ້າຕົວະ, ຂີ້ລັກມັກສົກ, ຫລິ້ນຊູ້, ຂັດແย้ງກັນຂຶ້ນຢ່າງ ຮຸນແຮງ, ແລະ ປົບໜີໄປຫາແຜ່ນດິນນີໄຟໃນບັນດາຊາວເລ ມັນ—

And it was because of the pride of their hearts, because of their exceeding riches, yea, it was because of their oppression to the poor, withholding their food from the hungry, withholding their clothing from the naked, and smiting their humble brethren upon the cheek, making a mock of that which was sacred, denying the spirit of prophecy and of revelation, murdering, plundering, lying, stealing, committing adultery, rising up in great contentions, and deserting away into the land of Nephi, among the Lamanites—

ຈ ແລະ ເປັນຍ້ອນຄວາມຊົ່ວຮ້າຍອັນໃຫຍ່ຫລວງນີ້, ແລະ ການ ອວດອ້າງໃນກຳລັງຂອງພວກເຂົາເອງ, ພວກເຂົາຈຶ່ງຖືກປະຖິ້ມ ໃຫ້ຢູ່ກັບກຳລັງຂອງຕົນເອງ; ສະນັ້ນ ພວກເຂົາຈຶ່ງບໍ່ຈະເລີນຮຸ່ງ ເຮືອງ ແລະ ກັບມາເປັນຄົນເປັນທຸກ ແລະ ຖືກທຸບຕີ, ຖືກຂັບໄລ່ ອອກໄປຕໍ່ໜ້າຊາວເລມັນ, ຈົນວ່າຕ້ອງເສຍຄວາມເປັນເจ้าຂອງ ແຜ່ນດິນຂອງຕົນເອງທັງໝົດໄປ.

And because of this their great wickedness, and their boastings in their own strength, they were left in their own strength; therefore they did not prosper, but were afflicted and smitten, and driven before the Lamanites, until they had lost possession of almost all their lands.

ຈ ແຕ່ຈົ່ງເບິ່ງ, โมโรไนธาได้ສັ່ງສອນຜູ້ຄົນຫລາຍເລື່ອງເຖິງ ຄວາມຊົ່ວຮ້າຍຂອງພວກເຂົາ, ແລະ ນີໄຟກັບລີໄຮຜູ້ຊຶ່ງເປັນລູກ ຊາຍຂອງຮີລາມັນກໍໄດ້ສັ່ງສອນຜູ້ຄົນຫລາຍເລື່ອງຄືກັນ, ແท้ ຈິງແລ້ວ, ພວກເພິ່ນໄດ້ທຳນາຍຫລາຍເລື່ອງແກ່ພວກເຂົາ ກ່ຽວກັບຄວາມຊົ່ວຮ້າຍຂອງພວກເຂົາ, ແລະ ສິ່ງທີ່ຈະເກີດຂຶ້ນ ກັບພວກເຂົາ ຖ້າຫາກພວກເຂົາບໍ່ກັບໃຈຈາກບາບຂອງພວກ ເຂົາ.

And it came to pass in the sixty and first year of the reign of the judges, Moronihah and Nephi and Lehi, who were the sons of Helaman, did preach many things unto the people because of their iniquity, and also preach many things unto the people, yea, and did prophesy many things unto them concerning their iniquities, and what should come unto them if they did not repent of their sins.

ຈ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ກັບໃຈ, ແລະ ຕາບໃດທີ່ພວກເຂົາໄດ້ກັບໃຈ ພວກເຂົາກໍໄດ້ຈະເລີນຮຸ່ງເຮືອງ ຂຶ້ນ.

And it came to pass that they did repent, and inasmuch as they did repent they did begin to prosper.

For when Moronihah saw that they did repent he did venture to lead them forth from place to place, and from city to city, even until they had regained the one-half of their property and the one-half of all their lands.

And thus ended the sixty and first year of the reign of the judges.

And it came to pass in the sixty and second year of the reign of the judges, that Moronihah could obtain no more possessions over the Lamanites.

Therefore they did abandon their design to obtain the remainder of their lands, for so numerous were the Lamanites that it became impossible for the Nephites to obtain more power over them; therefore Moronihah did employ all his armies in maintaining those parts which he had taken.

And it came to pass, because of the greatness of the number of the Lamanites the Nephites were in great fear, lest they should be overpowered, and trodden down, and slain, and destroyed.

Yea, they began to remember the prophecies of Alma, and also the words of Mosiah; and they saw that they had been a stiffnecked people, and that they had set at naught the commandments of God;

And that they had altered and trampled under their feet the laws of Mosiah, or that which the Lord commanded him to give unto the people; and they saw that their laws had become corrupted, and that they had become a wicked people, insomuch that they were wicked even like unto the Lamanites.

And because of their iniquity the church had begun to dwindle; and they began to disbelieve in the spirit of prophecy and in the spirit of revelation; and the judgments of God did stare them in the face.

And they saw that they had become weak, like unto their brethren, the Lamanites, and that the Spirit of the Lord did no more preserve them; yea, it had withdrawn from them because the Spirit of the Lord doth not dwell in unholy temples—

ເພາະເມື່ອໂມໂຣໄນຮາເຫັນວ່າພວກເຂົາໄດ້ກັບໃຈແລ້ວ ເພີ່ນ
ຈຶ່ງໄດ້ພາພວກເຂົາໄປຕໍ່ສູ້ຈາກບ່ອນໜຶ່ງ ຫາອີກບ່ອນໜຶ່ງ,
ແລະ ຈາກເມືອງໜຶ່ງໄປຫາອີກເມືອງໜຶ່ງ, ຈົນວ່າພວກເຂົາໄດ້
ເຄິ່ງໜຶ່ງຂອງສິ່ງທີ່ພວກເຂົາເປັນເຈົ້າຂອງ ແລະ ເຄິ່ງໜຶ່ງຂອງ
ແຜ່ນດິນທັງໝົດຂອງພວກເຂົາຄືນມາ.

ແລະ ປີທີຫົກສິບເອັດແຫ່ງການປົກຄອງຂອງຜູ້ຕັດສິນໄດ້
ສິ້ນສຸດລົງດັ່ງນີ້.

ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີຫົກສິບສອງແຫ່ງການ
ປົກຄອງຂອງຜູ້ຕັດສິນ, ວ່າໂມໂຣໄນຮາບໍ່ສາມາດຍຶດເອົາ
ແຜ່ນດິນຄືນມາຈາກຊາວເລມັນອີກແລ້ວ.

ສະນັ້ນ ພວກເຂົາຈຶ່ງໄດ້ລົ້ມເລີກແຜນການຂອງພວກເຂົາທີ່
ຈະຍຶດເອົາແຜ່ນດິນທີ່ເຫລືອຢູ່ຄືນມາ, ເພາະວ່າຊາວເລມັນມີ
ຈຳນວນຫລວງຫລາຍທີ່ສຸດ ຈົນວ່າເປັນໄປບໍ່ໄດ້ເລີຍທີ່ຊາວນີ
ໄຟຈະມີອຳນາດເໜືອພວກເຂົາ; ສະນັ້ນ ໂມໂຣໄນຮາຈຶ່ງໄດ້ໃຊ້
ກຳລັງທັບທັງໝົດຂອງເພີ່ນໃຫ້ປົກປັກຮັກສາແຜ່ນດິນສ່ວນທີ່
ເພີ່ນຍຶດຄືນມາໄດ້ນັ້ນ.

ແລະ ເຫດການໄດ້ບັງເກີດຂຶ້ນ, ຍ້ອນວ່າຄວາມຫລວງຫລາຍ
ຂອງຈຳນວນຜູ້ຄົນຂອງຊາວເລມັນ ຊາວນີໄຟຈຶ່ງເກີດມີຄວາມ
ຢ້ານກົວຫລາຍຂຶ້ນ, ຢ້ານວ່າຕົນເອງຈະຜ່າຍແພ້, ແລະ ຖືກ
ຢຽບຍ່ຳລົງ, ແລະ ຖືກຂ້າ, ແລະ ຖືກທຳລາຍ.

ແທ້ຈິງແລ້ວ, ພວກເຂົາເລີ່ມຈື່ຈຳຄຳທຳນາຍຂອງແອວມາ,
ແລະ ຄຳທຳນາຍຂອງໂມໄຊຢານຳອີກ; ແລະ ພວກເຂົາເຫັນວ່າ
ຕົນເອງເປັນຄົນແຂງຄໍ, ແລະ ວ່າພວກເຂົາໄດ້ຖືວ່າພຣະບັນຍັດ
ຂອງພຣະເຈົ້າບໍ່ມີຄຸນຄ່າ;

ແລະ ວ່າພວກເຂົາໄດ້ປ່ຽນແປງ ແລະ ຢຽບຍ່ຳ ກົດຂອງໂມໄຊ
ຢາໄວ້ໃຕ້ຕີນຂອງພວກເຂົາ, ຫລື ວ່າເປັນກົດທີ່ພຣະຜູ້ເປັນເຈົ້າ
ບັນຊາເພີ່ນໃຫ້ບອກແກ່ຜູ້ຄົນ; ແລະ ພວກເຂົາເຫັນວ່າກົດຂອງ
ພວກເຂົາເສື່ອມໂຊມລົງ, ແລະ ວ່າພວກເຂົາໄດ້ກັບກາຍເປັນຄົນ
ຊົ່ວ, ເຖິງຂະໜາດທີ່ພວກເຂົາຊົ່ວຄືກັນກັບຊາວເລມັນ.

ແລະ ເປັນຍ້ອນຄວາມຊົ່ວຮ້າຍຂອງພວກເຂົາ ສາດສະໜາ
ຈັກຈຶ່ງເລີ່ມ ເສື່ອມໂຊມລົງ; ແລະ ພວກເຂົາ ເລີ່ມບໍ່ເຊື່ອຖືໃນ
ວິນຍານແຫ່ງການທຳນາຍ ແລະ ວິນຍານແຫ່ງການເປີດເຜີຍ;
ແລະ ການພິພາກສາຂອງພຣະເຈົ້າກຳລັງຫລຽວເບິ່ງໜ້າພວກ
ເຂົາຢູ່.

ແລະ ພວກເຂົາເຫັນວ່າຕົນເອງກັບມາເປັນ ຄົນອ່ອນແອຄື
ກັນກັບຊາວເລມັນພີ່ນ້ອງຂອງພວກເຂົາ, ແລະ ພຣະວິນຍານ
ຂອງພຣະຜູ້ເປັນເຈົ້າບໍ່ປົກປ້ອງພວກເຂົາຕໍ່ໄປອີກແລ້ວ; ແທ້ຈິງ
ແລ້ວ, ພຣະອົງໄດ້ຖອນໄປຈາກພວກເຂົາ ເພາະ ພຣະວິນຍານ
ຂອງພຣະຜູ້ເປັນເຈົ້າຈະບໍ່ປະທັບຢູ່ໃນວິຫານທີ່ ບໍ່ບໍລິສຸດ—

ຂ ສະນັ້ນ ພຣະຜູ້ເປັນເຈົ້າຈຶ່ງຢຸດປົກປ້ອງພວກເຂົາດ້ວຍ ອຳນາດອັນມະຫັດສະຈັນອັນຫາທີ່ປຽບບໍ່ໄດ້ຂອງພຣະອົງ, ເພາະວ່າພວກເຂົາໄດ້ຕົກໄປຢູ່ໃນສະພາບຂອງ ຄວາມບໍ່ເຊື່ອຖື ແລະ ຄວາມຊົ່ວຮ້າຍອັນເປັນຕາຢ້ານນັ້ນ; ແລະ ພວກເຂົາຈຶ່ງ ເຫັນໄດ້ວ່າຊາວເລມັນມີອຳນາດຫລາຍກວ່າພວກເຂົາ, ແລະ ພວກເຂົາຈະຕ້ອງຕາຍຢ່າງຫລີກລ້ຽງບໍ່ໄດ້ ຖ້າຫາກພວກເຂົາ ບໍ່ກັບຄືນມາ ໃກ້ຊິດຢູ່ກັບພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ ພວກເຂົາ.

ຂ ເພາະຈົ່ງເບິ່ງ, ພວກເຂົາເຫັນວ່າຊາວເລມັນມີກຳລັງຫລາຍ ເທົ່າກັບກຳລັງຂອງພວກເຂົາ, ຊຶ່ງເປັນກຳລັງຂອງຄົນຕໍ່ຄົນ. ແລະ ພວກເຂົາໄດ້ຕົກໄປສູ່ການລ່ວງລະເມີດອັນໃຫຍ່ຫລວງດັ່ງ ນີ້; ແທ້ຈິງແລ້ວ, ພວກເຂົາໄດ້ກັບມາອ່ອນແອເພາະການລ່ວງ ລະເມີດຂອງພວກເຂົາໃນເວລາ ບໍ່ຫລາຍປີດັ່ງນີ້.

Therefore the Lord did cease to preserve them by his miraculous and matchless power, for they had fallen into a state of unbelief and awful wickedness; and they saw that the Lamanites were exceedingly more numerous than they, and except they should cleave unto the Lord their God they must unavoidably perish.

For behold, they saw that the strength of the Lamanites was as great as their strength, even man for man. And thus had they fallen into this great transgression; yea, thus had they become weak, because of their transgression, in the space of not many years.

ຮີລາມັນ ๕

๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີດຽວກັນນີ້, ຈົ່ງເບິ່ງ, ນີໄຟ ໄດ້ມອບບັນລັງຕັດສິນໃຫ້ແກ່ຄົນຜູ້ໜຶ່ງຊື່ວ່າ ຊີໂຊຣໍາ.

๘ ເພາະວ່າຜູ້ຄົນເປັນຜູ້ແຕ່ງຕັ້ງກົດໝາຍ ແລະ ອອກສຽງ ເລືອກເອົາຜູ້ປົກຄອງຂອງພວກເຂົາເອງ, ແຕ່ຜູ້ທີ່ ເລືອກເອົາ ຄວາມຊົ່ວມີຫລາຍກວ່າຜູ້ທີ່ເລືອກເອົາຄວາມດີ, ສະນັ້ນ ພວກ ເຂົາຈຶ່ງກໍາລັງສຸກເພື່ອຄວາມພິນາດແລ້ວ, ເພາະວ່າກົດໝາຍໄດ້ ເສື່ອມໂຊມລົງ.

๙ ແທ້ຈິງແລ້ວ, ແລະ ນີ້ຍັງບໍ່ໝົດ; ພວກເຂົາເປັນຄົນແຂງຄໍ, ເຖິງຂະໜາດທີ່ກົດໝາຍ ຫລື ຄວາມຍຸດຕິທໍາຈະປົກຄອງພວກ ເຂົາບໍ່ໄດ້, ນອກຈາກຈະພາໄປເຖິງຄວາມພິນາດເທົ່ານັ້ນ.

๑๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ນີໄຟໂສກເສົ້າຫລາຍເພາະ ຄວາມຊົ່ວຮ້າຍຂອງພວກເຂົາ; ແລ້ວເພິ່ນຈຶ່ງ ໄດ້ສະລະບັນລັງ ຕັດສິນຂອງເພິ່ນເພື່ອໄປສັ່ງສອນພຣະຄໍາຂອງພຣະເຈົ້າ ຕະຫລອດວັນເວລາທີ່ເຫລືອຢູ່ຂອງເພິ່ນ, ແລະ ລີໄຮນ້ອງຊາຍ ຂອງເພິ່ນກໍຄືກັນຕະຫລອດວັນເວລາທີ່ເຫລືອຢູ່ຂອງເພິ່ນ;

๑๑ ເພາະວ່າພວກເພິ່ນຈື່ຈໍາຄໍາເວົ້າຂອງຮີລາມັນບິດາຂອງພວກ ເພິ່ນທີ່ໄດ້ເວົ້າໄວ້ກັບພວກເພິ່ນ. ແລະ ນີ້ຄືຄໍາເວົ້າຂອງຮີລາມັນ ຊຶ່ງກ່າວວ່າ:

๑๒ ຈົ່ງເບິ່ງ, ລູກຂອງພໍ່, ພໍ່ປາດຖະໜາຢາກໃຫ້ລູກຈື່ຈໍາທີ່ຈະ ຮັກສາພຣະບັນຍັດຂອງພຣະເຈົ້າ; ແລະ ພໍ່ຢາກໃຫ້ລູກປະກາດ ຂໍ້ຄວາມນີ້ຕໍ່ຜູ້ຄົນ. ຈົ່ງເບິ່ງ, ພໍ່ໄດ້ຕັ້ງຊື່ໃຫ້ລູກຕາມຊື່ຂອງ ບິດາ ມານດາຄົນທໍາອິດ ຜູ້ທີ່ໄດ້ອອກມາຈາກແຜ່ນດິນເຢຣູຊາເລັມ; ແລະ ພໍ່ເຮັດໄປເພື່ອຢາກໃຫ້ລູກຈື່ຈໍາຊື່ຂອງລູກ; ແລ້ວລູກກໍຈະ ຈື່ຈໍາພວກເພິ່ນ ແລະ ເວລາລູກຈື່ຈໍາພວກເພິ່ນ ລູກກໍຈະຈື່ຈໍາ ຜົນງານຂອງພວກເພິ່ນ; ແລະ ເວລາລູກຈື່ຈໍາຜົນງານຂອງ ພວກເພິ່ນ ລູກຈະຮູ້ດີວ່າມັນຖືກເວົ້າເຖິງ, ແລະ ຂຽນໄວ້ວ່າ ພວກເພິ່ນນັ້ນເປັນ ຜູ້ປະເສີດ.

๑๓ ສະນັ້ນ, ລູກຂອງພໍ່, ພໍ່ຢາກໃຫ້ລູກເຮັດສິ່ງທີ່ດີເພື່ອຈະໄດ້ ຖືກເວົ້າເຖິງ ແລະ ຖືກຂຽນໄວ້ຄືກັນກັບທີ່ພວກເພິ່ນໄດ້ຖືກເວົ້າ ເຖິງ ແລະ ຖືກຂຽນເຖິງ.

๑๔ ແລະ ບັດນີ້ລູກຂອງພໍ່, ຈົ່ງເບິ່ງ ພໍ່ມີບາງສິ່ງທີ່ຈະຂໍຈາກລູກຄື ບໍ່ໃຫ້ລູກເຮັດສິ່ງເຫລົ່ານີ້ເພື່ອເປັນການອວດອ້າງ, ແຕ່ໃຫ້ລູກ ເຮັດສິ່ງເຫລົ່ານີ້ ເພື່ອເປັນການສະສົມ ຊັບສົມບັດໄວ້ໃນ ສະຫວັນເພື່ອຕົນເອງ, ແທ້ຈິງແລ້ວ, ມັນເປັນສິ່ງທີ່ໝົດບໍ່ເປັນ ແລະ ເປັນຢູ່ຊົ່ວນິລັນດອນ; ແທ້ຈິງແລ້ວ, ເພື່ອລູກຈະມີຂອງ ປະທານອັນມີ ຄຸນຄ່າແຫ່ງຊີວິດນິລັນດອນ, ຊຶ່ງພວກເຮົາມີ ເຫດຜົນທີ່ຈະຄິດວ່າບັນພະບຸລຸດຂອງພວກເຮົາໄດ້ຮັບມັນມາ ແລ້ວ.

Helaman 5

And it came to pass that in this same year, behold, Nephi delivered up the judgment-seat to a man whose name was Cezoram.

For as their laws and their governments were established by the voice of the people, and they who chose evil were more numerous than they who chose good, therefore they were ripening for destruction, for the laws had become corrupted.

Yea, and this was not all; they were a stiffnecked people, insomuch that they could not be governed by the law nor justice, save it were to their destruction.

And it came to pass that Nephi had become weary because of their iniquity; and he yielded up the judgment-seat, and took it upon him to preach the word of God all the remainder of his days, and his brother Lehi also, all the remainder of his days;

For they remembered the words which their father Helaman spake unto them. And these are the words which he spake:

Behold, my sons, I desire that ye should remember to keep the commandments of God; and I would that ye should declare unto the people these words. Behold, I have given unto you the names of our first parents who came out of the land of Jerusalem; and this I have done that when you remember your names ye may remember them; and when ye remember them ye may remember their works; and when ye remember their works ye may know how that it is said, and also written, that they were good.

Therefore, my sons, I would that ye should do that which is good, that it may be said of you, and also written, even as it has been said and written of them.

And now my sons, behold I have somewhat more to desire of you, which desire is, that ye may not do these things that ye may boast, but that ye may do these things to lay up for yourselves a treasure in heaven, yea, which is eternal, and which fadeth not away; yea, that ye may have that precious gift of eternal life, which we have reason to suppose hath been given to our fathers.

๙ ໂอ້ ຈົ່ງຈື່ຈຳໄວ້, ຈື່ຈຳໄວ້, ລູກຂອງພໍ່, ຖ້ອຍຄຳຂອງກະສັດ ເບັນຢາມິນທີ່ໄດ້ກ່າວກັບຜູ້ຄົນຂອງເພີ່ນ; ແທ້ຈິງແລ້ວ, ຈົ່ງຈື່ຈຳ ໄວ້ວ່າ ບໍ່ມີທາງ ຫລື ວິທີອື່ນໃດເລີຍທີ່ມະນຸດຈະລອດໄດ້, ນອກຈາກທາງໂລຫິດທີ່ ຊົດໃຊ້ແທນຂອງພຣະເຢຊູຄຣິດຜູ້ຈະ ສະເດັດມາເທົ່ານັ້ນ; ແທ້ຈິງແລ້ວ, ພຣະອົງຈະສະເດັດມາເພື່ອ ໄຖ່ ໂລກ.

๑๐ ແລະ ຈົ່ງຈື່ຈຳ ຄຳເວົ້າຂອງແອມມິວເລັກນຳອີກ ຊຶ່ງເພີ່ນໄດ້ ເວົ້າຕໍ່ຊີເອສຣອມ, ຢູ່ໃນເມືອງອຳໂມນໄນຮານັ້ນ; ເພາະເພີ່ນໄດ້ ເວົ້າກັບລາວວ່າ ພຣະຜູ້ເປັນເຈົ້າຈະສະເດັດມາຢ່າງແນ່ນອນ ເພື່ອໄຖ່ຜູ້ຄົນຂອງພຣະອົງ, ແຕ່ວ່າພຣະອົງຈະບໍ່ໄຖ່ພວກເຂົາ ໃນບາບຂອງພວກເຂົາ, ແຕ່ຈະໄຖ່ພວກເຂົາຈາກບາບຂອງ ພວກເຂົາ.

๑๑ ແລະ ພຣະອົງມີອຳນາດຊຶ່ງໄດ້ຮັບຈາກພຣະບິດາເພື່ອໄຖ່ ມະນຸດຈາກບາບຂອງພວກເຂົາ ຍ້ອນການກັບໃຈ; ສະນັ້ນ ພຣະອົງຈຶ່ງໄດ້ ສົ່ງທູດຂອງພຣະອົງລົງມາເພື່ອປະກາດຂ່າວ ກ່ຽວກັບເງື່ອນໄຂຂອງການກັບໃຈ, ຊຶ່ງຈະນຳໄປຫາອຳນາດ ຂອງພຣະຜູ້ໄຖ່, ໄປຫາຄວາມລອດຂອງຈິດວິນຍານຂອງພວກ ເຂົາ.

๑๒ ແລະ ບັດນີ້, ຈົ່ງຈື່ໄວ້, ລູກຂອງພໍ່, ຈົ່ງຈື່ໄວ້ວ່າ ລູກຈະຕ້ອງ ສ້າງ ຮາກຖານຂອງລູກຂຶ້ນເທິງ ດານຫີນຂອງພຣະຜູ້ໄຖ່ຂອງ ພວກເຮົາ, ຄື ພຣະຄຣິດ, ພຣະບຸດຂອງພຣະເຈົ້າ; ເພື່ອວ່າເມື່ອ ມານສົ່ງລົມພະຍຸຮ້າຍຂອງມັນມາ, ແທ້ຈິງແລ້ວ, ຟ້າແມບ ເຫລື້ອມກັບລົມບ້າໝູຂອງມັນມາ, ແທ້ຈິງແລ້ວ, ເມື່ອໝາກ ເຫັບທັງໝົດ ແລະ ລົມຝົນອັນແຮງກ້າຂອງມັນລົງມາຕີລູກ, ມັນຈະບໍ່ມີອຳນາດອັນໃດເໜືອລູກເລີຍທີ່ຈະແກ່ລູກລົງໄປຫາ ເຫວເລິກແຫ່ງຄວາມທຸກທໍລະມານ ແລະ ຄວາມຈິບຫາຍອັນບໍ່ ສິ້ນສຸດ, ເພາະດານຫີນບ່ອນທີ່ລູກຖືກສ້າງຂຶ້ນເທິງມັນ ຊຶ່ງເປັນ ຮາກຖານທີ່ແໜ້ນໜາ, ເປັນຮາກຖານຊຶ່ງຫາກມະນຸດສ້າງຂຶ້ນ ເທິງມັນ ພວກເຂົາຈະຕົກໄປບໍ່ໄດ້.

๑๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ນີ້ຄືຄຳເວົ້າຊຶ່ງຮີລາມັນໄດ້ ສິດສອນລູກຊາຍຂອງເພີ່ນ; ແທ້ຈິງແລ້ວ, ເພີ່ນໄດ້ສິດສອນ ພວກເພີ່ນຫລາຍເລື່ອງຊຶ່ງບໍ່ໄດ້ຂຽນໄວ້, ແລະ ຫລາຍເລື່ອງຊຶ່ງ ໄດ້ຂຽນໄວ້.

๑๔ ແລະ ພວກເພີ່ນໄດ້ຈື່ຈຳຄຳເວົ້າຂອງເພີ່ນ; ແລະ ສະນັ້ນ ພວກເພີ່ນຈຶ່ງໄດ້ອອກໄປ, ໂດຍຮັກສາພຣະບັນຍັດຂອງ ພຣະເຈົ້າ, ເພື່ອຈະໄດ້ສິດສອນພຣະຄຳຂອງພຣະເຈົ້າໃຫ້ແກ່ ບັນດາຜູ້ຄົນຂອງນີໄຟທັງໝົດ, ໂດຍເລີ່ມຕົ້ນຕັ້ງແຕ່ເມືອງອຸດົມ ສົມບູນໄປ;

๑๕ ແລະ ຈາກນັ້ນກໍໄປຫາເມືອງກິດ; ແລະ ຈາກເມືອງກິດກໍໄປ ຫາເມືອງມິວເລັກ.

O remember, remember, my sons, the words which king Benjamin spake unto his people; yea, remember that there is no other way nor means whereby man can be saved, only through the atoning blood of Jesus Christ, who shall come; yea, remember that he cometh to redeem the world.

And remember also the words which Amulek spake unto Zeezrom, in the city of Ammonihah; for he said unto him that the Lord surely should come to redeem his people, but that he should not come to redeem them in their sins, but to redeem them from their sins.

And he hath power given unto him from the Father to redeem them from their sins because of repentance; therefore he hath sent his angels to declare the tidings of the conditions of repentance, which bringeth unto the power of the Redeemer, unto the salvation of their souls.

And now, my sons, remember, remember that it is upon the rock of our Redeemer, who is Christ, the Son of God, that ye must build your foundation; that when the devil shall send forth his mighty winds, yea, his shafts in the whirlwind, yea, when all his hail and his mighty storm shall beat upon you, it shall have no power over you to drag you down to the gulf of misery and endless wo, because of the rock upon which ye are built, which is a sure foundation, a foundation whereon if men build they cannot fall.

And it came to pass that these were the words which Helaman taught to his sons; yea, he did teach them many things which are not written, and also many things which are written.

And they did remember his words; and therefore they went forth, keeping the commandments of God, to teach the word of God among all the people of Nephi, beginning at the city Bountiful;

And from thenceforth to the city of Gid; and from the city of Gid to the city of Mulek;

ແລະ ຈາກເມືອງໜຶ່ງກໍໄປຫາອີກເມືອງໜຶ່ງ ຈົນວ່າພວກ
ເພີ່ນໄດ້ອອກໄປຫາບັນດາຜູ້ຄົນຂອງນີໄຟທັງໝົດ ຊຶ່ງຢູ່ໃນ
ແຜ່ນດິນທາງໃຕ້; ແລະ ຈາກທີ່ນັ້ນ ໄດ້ເຂົ້າໄປໃນແຜ່ນດິນເຊຣາ
ເຮັມລາໄປຫາບັນດາຊາວເລມັນ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເພີ່ນໄດ້ສັ່ງສອນດ້ວຍ
ພະລັງອັນຍິ່ງໃຫຍ່, ເຖິງຂະໜາດທີ່ພວກເພີ່ນໄດ້ເຮັດໃຫ້
ພວກທີ່ແຍກອອກໄປຈາກຊາວນີໄຟຍອມຈຳນົນ, ເຖິງຂະໜາດ
ທີ່ພວກເຂົາໄດ້ອອກມາຮັບສາລະພາບບາບຂອງຕົນ ແລະ ຮັບ
ບັບຕິສະມາໄວ້ກັບການກັບໃຈ, ແລະ ກັບຄືນໄປຫາຊາວນີໄຟ
ທັນທີ ເພື່ອຈະພະຍາຍາມແກ້ໄຂຄວາມຜິດພາດທີ່ຕົນໄດ້
ກະທຳໄປນັ້ນ.

๑ ແທ້ຈິງແລ້ວ, ແລະ ພວກເຮົາຈະເຫັນໄດ້ໃນເວລາທີ່ພຣະອົງເຮັດໃຫ້ຜູ້ຄົນຂອງພຣະອົງຈະເລີນຮຸ່ງເຮືອງຂຶ້ນ, ແທ້ຈິງແລ້ວ, ໃນການເພີ່ມພູນໄຮ່ນາຂອງພວກເຂົາ, ຝູງສັດຂອງພວກເຂົາ ແລະ ຝູງສັດໃຊ້ແຮງງານຂອງພວກເຂົາ, ແລະ ຄຳຂອງພວກເຂົາ, ແລະ ເງິນຂອງພວກເຂົາ, ແລະ ສິ່ງຂອງມີຄ່ານາໆປະການຂອງພວກເຂົາ ແລະ ສິ່ງຂອງທີ່ເຮັດດ້ວຍຝີມືອັນປານີດຂອງພວກເຂົາ, ໄວ້ຊີວິດຂອງພວກເຂົາ, ແລະ ປົດປ່ອຍພວກເຂົາໃຫ້ພົ້ນຈາກກຳມືຂອງສັດຕູ; ເຮັດໃຫ້ໃຈຂອງສັດຕູຂອງພວກເຂົາອ່ອນລົງ ເພື່ອພວກເຂົາຈະບໍ່ໄດ້ມາເຮັດສົງຄາມກັບພວກເຂົາອີກ; ແທ້ຈິງແລ້ວ, ແລະ ໂດຍສະຫລຸບ, ກະທຳທຸກສິ່ງທຸກຢ່າງເພື່ອຄວາມຜາສຸກ ແລະ ຄວາມສຸກສະບາຍຂອງຜູ້ຄົນຂອງພຣະອົງ; ແທ້ຈິງແລ້ວ, ມັນກໍຍັງມີຕອນທີ່ພວກເຂົາເຮັດໃຈແຂງກະດ້າງຢູ່ ແລະ ໄດ້ຫລົງລືມພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ແລະ ໄດ້ ຢຽບຍ່ຳພຣະຜູ້ບໍລິສຸດໄວ້ໃຕ້ຕີນຂອງພວກເຂົາ—ແທ້ຈິງແລ້ວ, ແລະ ທັງໝົດນີ້ຍ້ອນວ່າຄວາມສະບາຍຂອງພວກເຂົາ, ແລະ ຄວາມຈະເລີນຮຸ່ງເຮືອງຢ່າງຍິ່ງຂອງພວກເຂົາ.

Yea, and we may see at the very time when he doth prosper his people, yea, in the increase of their fields, their flocks and their herds, and in gold, and in silver, and in all manner of precious things of every kind and art; sparing their lives, and delivering them out of the hands of their enemies; softening the hearts of their enemies that they should not declare wars against them; yea, and in fine, doing all things for the welfare and happiness of his people; yea, then is the time that they do harden their hearts, and do forget the Lord their God, and do trample under their feet the Holy One—yea, and this because of their ease, and their exceedingly great prosperity.

๓ ແລະ ພວກເຮົາຈຶ່ງເຫັນດັ່ງນັ້ນວ່າ ຖ້າຫາກພຣະຜູ້ເປັນເຈົ້າບໍ່ຕີສອນຜູ້ຄົນຂອງພຣະອົງດ້ວຍຄວາມທຸກນາໆປະການ, ແທ້ຈິງແລ້ວ, ຖ້າຫາກພຣະອົງບໍ່ສະເດັດມາຢ້ຽມຢາມພວກເຂົາດ້ວຍຄວາມຕາຍ ແລະ ດ້ວຍຄວາມຢ້ານກົວຫລາຍທີ່ສຸດ, ແລະ ດ້ວຍຄວາມອຶດຢາກ, ແລະ ດ້ວຍພະຍາດໂລຄາ, ພວກເຂົາກໍຈະບໍ່ລະນຶກເຖິງພຣະອົງເລີຍ.

And thus we see that except the Lord doth chasten his people with many afflictions, yea, except he doth visit them with death and with terror, and with famine and with all manner of pestilence, they will not remember him.

๔ ໂອ້ ລູກຫລານມະນຸດ ເຈົ້າຊ່າງມາໂງ່ແທ້ນໍ, ແລະ ອວດດີແທ້ນໍ, ແລະ ຊົ່ວແທ້ນໍ, ແລະ ຕ່ຳຊ້າແທ້ນໍ, ແລະ ວ່ອງໄວແທ້ນໍທີ່ຈະເຮັດຄວາມຊົ່ວຮ້າຍ, ແລະ ຊັກຊ້າແທ້ນໍທີ່ຈະເຮັດຄວາມດີ; ແທ້ຈິງແລ້ວ, ວ່ອງໄວແທ້ນໍທີ່ຈະເຊື່ອຟັງຄຳເວົ້າຂອງມານຮ້າຍ ແລະ ໝົກໝຸ້ນຢູ່ກັບສິ່ງທີ່ບໍ່ມີປະໂຫຍດຂອງໂລກ!

O how foolish, and how vain, and how evil, and devilish, and how quick to do iniquity, and how slow to do good, are the children of men; yea, how quick to hearken unto the words of the evil one, and to set their hearts upon the vain things of the world!

๕ ແທ້ຈິງແລ້ວ, ວ່ອງໄວແທ້ນໍທີ່ຈະລະເມີເພີ້ຝັນດ້ວຍ ຄວາມທະນົງຕົວ; ແທ້ຈິງແລ້ວ, ວ່ອງໄວແທ້ນໍທີ່ຈະອວດອ້າງ ແລະ ເຮັດນາໆປະການຊຶ່ງເປັນຄວາມຊົ່ວຮ້າຍ; ແລະ ຊັກຊ້າແທ້ນໍທີ່ຈະລະນຶກເຖິງພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ແລະ ບໍ່ໄດ້ຕັ້ງໃຈຟັງຄຳແນະນຳຂອງພຣະອົງ, ແທ້ຈິງແລ້ວ, ຊັກຊ້າແທ້ນໍທີ່ຈະ ເດີນໃນທາງແຫ່ງປັນຍາ!

Yea, how quick to be lifted up in pride; yea, how quick to boast, and do all manner of that which is iniquity; and how slow are they to remember the Lord their God, and to give ear unto his counsels, yea, how slow to walk in wisdom's paths!

ຜ ຈົ່ງເບິ່ງ, ພວກເຂົາບໍ່ປາດຖະໜາທີ່ຈະໃຫ້ພຣະຜູ້ເປັນເຈົ້າອົງ ເປັນພຣະເຈົ້າຂອງພວກເຂົາ, ຜູ້ ສ້າງພວກເຂົາ, ປົກຄອງພວກ ເຂົາ, ແລະ ຄອບຄອງດູແລພວກເຂົາ; ທັງໆທີ່ພຣະກະລຸນາທິ ຄຸນອັນຍິ່ງໃຫຍ່ຂອງພຣະອົງ ແລະ ພຣະເມດຕາຂອງພຣະອົງມີ ຕໍ່ພວກເຂົາ, ພວກເຂົາຍັງຖືວ່າຄຳແນະນຳຂອງພຣະອົງບໍ່ມີຄ່າ, ແລະ ພວກເຂົາບໍ່ຍອມໃຫ້ພຣະອົງເປັນຜູ້ນຳທາງຂອງພວກ ເຂົາ.

Behold, they do not desire that the Lord their God, who hath created them, should rule and reign over them; notwithstanding his great goodness and his mercy towards them, they do set at naught his counsels, and they will not that he should be their guide.

ກ ໂອ້ ລູກຫລານມະນຸດເອີຍ ເຈົ້າຊ່າງມາ ບໍ່ມີຄຸນຄ່າຫຍັງເລີຍ ແທ້ນໍ; ແທ້ຈິງແລ້ວ, ພວກເຂົາຍັງນ້ອຍໄປກວ່າຂີ້ຝຸ່ນດິນຂອງ ແຜ່ນດິນໂລກ.

O how great is the nothingness of the children of men; yea, even they are less than the dust of the earth.

ຂ ເພາະຈົ່ງເບິ່ງ, ຂີ້ຝຸ່ນຂອງແຜ່ນດິນໂລກຍັງສາມາດ ເຄື່ອນໄຫວໄປມາທາງນັ້ນທາງນີ້ໄດ້, ເພື່ອແຍກອອກຈາກກັນ ດ້ວຍການບັນຊາຂອງພຣະເຈົ້າຜູ້ຍິ່ງໃຫຍ່ ແລະ ເປັນນິດຂອງ ພວກເຮົາ.

For behold, the dust of the earth moveth hither and thither, to the dividing asunder, at the command of our great and everlasting God.

ຄ ແທ້ຈິງແລ້ວ, ຈົ່ງເບິ່ງ ດ້ວຍສຸລະສຽງຂອງພຣະອົງ ເນີນພູ ແລະ ພູເຂົາສັ່ນ ແລະ ຫວັ່ນໄຫວ.

Yea, behold at his voice do the hills and the mountains tremble and quake.

ງ ແລະ ໂດຍ ອຳນາດແຫ່ງສຸລະສຽງຂອງພຣະອົງ ມັນຈຶ່ງແຕກ ອອກ, ແລະ ກັບມາຮາບພຽງ ແລະ ກາຍມາເປັນຮ່ອມພູ.

And by the power of his voice they are broken up, and become smooth, yea, even like unto a valley.

ຈ ແທ້ຈິງແລ້ວ, ໂດຍອຳນາດແຫ່ງສຸລະສຽງຂອງພຣະອົງ ທັງ ແຜ່ນດິນໂລກສັ່ນສະເທືອນ;

Yea, by the power of his voice doth the whole earth shake;

ສ ແທ້ຈິງແລ້ວ, ໂດຍອຳນາດແຫ່ງສຸລະສຽງຂອງພຣະອົງ, ຫີນ ຮາກຖານສັ່ນສະເທືອນ, ເຖິງໃຈກາງ.

Yea, by the power of his voice, do the foundations rock, even to the very center.

ຊ ແທ້ຈິງແລ້ວ, ແລະ ຖ້າຫາກພຣະອົງກ່າວກັບແຜ່ນດິນໂລກ ວ່າ—ຈົ່ງເລື່ອນໄປ—ມັນກໍຈະເລື່ອນໄປ.

Yea, and if he say unto the earth—Move—it is moved.

ຍ ແທ້ຈິງແລ້ວ, ຖ້າຫາກພຣະອົງກ່າວກັບ ແຜ່ນດິນໂລກว່າ—ຈົ່ງ ກັບຄືນໄປ, ເພື່ອ ຕໍ່ມື້ອອກໄປໃຫ້ເປັນຫລາຍຊົ່ວໂມງ—ມັນ ກໍຈະເປັນໄປ;

Yea, if he say unto the earth—Thou shalt go back, that it lengthen out the day for many hours—it is done;

ຍ ແລະ ດ້ວຍເຫດນີ້, ຕາມພຣະຄຳຂອງພຣະອົງ ແຜ່ນດິນໂລກ ຈົ່ງກັບຄືນໄປ, ແລະ ມັນຈົ່ງປະກົດໃຫ້ມະນຸດເຫັນວ່າ ດວງ ຕາເວັນນັ້ນຢູ່ບ່ອນເກົ່າ; ແທ້ຈິງແລ້ວ, ແລະ ຈົ່ງເບິ່ງ, ມັນເປັນໄປ ຕາມນັ້ນ ເພາະໂດຍແນ່ນອນ ມັນແມ່ນແຜ່ນດິນໂລກທີ່ ເຄື່ອນໄຫວໄປມາ ແລະ ບໍ່ແມ່ນດວງຕາເວັນ.

And thus, according to his word the earth goeth back, and it appeareth unto man that the sun standeth still; yea, and behold, this is so; for surely it is the earth that moveth and not the sun.

ຍຜ ແລະ ຈົ່ງເບິ່ງ, ຖ້າຫາກພຣະອົງກ່າວກັບ ນ້ຳທີ່ເລິກທີ່ສຸດອີກ ວ່າ—ເຈົ້າ ຈົ່ງແຫ້ງ—ມັນກໍຈະເປັນໄປ.

And behold, also, if he say unto the waters of the great deep—Be thou dried up—it is done.

ຍກ ຈົ່ງເບິ່ງ, ຖ້າຫາກພຣະອົງກ່າວກັບພູເຂົາໜ່ວຍນີ້ວ່າ—ເຈົ້າ ຈົ່ງສູງຂຶ້ນ, ແລະ ຕົກລົງໃສ່ເມືອງນັ້ນເພື່ອຝັງມັນໄວ້—ຈົ່ງເບິ່ງ ມັນກໍຈະເປັນໄປ.

Behold, if he say unto this mountain—Be thou raised up, and come over and fall upon that city, that it be buried up—behold it is done.

ຄ. ๑๙ ແລະ ຈົ່ງເບິ່ງ, ຖ້າຫາກຜູ້ໃດ ເຊື່ອງຊັບສົມບັດໄວ້ໃນ ແຜ່ນດິນ, ແລະ ເມື່ອພຣະຜູ້ເປັນເຈົ້າກ່າວວ່າ—ໃຫ້ມັນຖືກ ສາບແຊ່ງຍ້ອນວ່າຄວາມຊົ່ວຮ້າຍຂອງຜູ້ທີ່ເຊື່ອງມັນໄວ້—ຈົ່ງ ເບິ່ງ, ມັນກໍຈະຖືກສາບແຊ່ງ.

ຄ. ๑๗ ແລະ ຖ້າຫາກພຣະຜູ້ເປັນເຈົ້າກ່າວວ່າ—ເຈົ້າຈົ່ງຖືກ ສາບແຊ່ງ, ເພື່ອຈະບໍ່ໃຫ້ຜູ້ໃດພົບເຫັນເຈົ້ານັບແຕ່ເວລານີ້ເປັນ ຕົ້ນໄປ ແລະ ຕະຫລອດການ—ຈົ່ງເບິ່ງ, ມັນຈະບໍ່ມີຜູ້ໃດພົບ ເຫັນມັນໄດ້ນັບແຕ່ເວລານີ້ເປັນຕົ້ນໄປ ແລະ ຕະຫລອດການ.

ຄ. ๘๐ ແລະ ຈົ່ງເບິ່ງ, ຖ້າຫາກພຣະຜູ້ເປັນເຈົ້າກ່າວກັບມະນຸດว่า—ເພາະຄວາມຊົ່ວຮ້າຍຂອງເຈົ້າ, ເຈົ້າຈະຖືກສາບແຊ່ງຕະຫລອດ ການ—ມັນກໍຈະເປັນໄປ.

ຄ. ๘๑ ແລະ ຖ້າຫາກພຣະຜູ້ເປັນເຈົ້າກ່າວว่า—ເພາະຄວາມ ຊົ່ວຮ້າຍຂອງເຈົ້າ, ເຈົ້າຈະຖືກຕັດອອກຈາກທີ່ປະທັບຂອງເຮົາ —ພຣະອົງຈະເຮັດໃຫ້ມັນເປັນໄປດັ່ງນັ້ນ.

ຄ. ๘๘ ແລະ ວິບັດແກ່ຜູ້ທີ່ພຣະອົງຈະກ່າວເຊັ່ນນີ້, ເພາະມັນຈະເປັນ ໄປກັບເຂົາຜູ້ເຮັດຄວາມຊົ່ວຮ້າຍ, ແລະ ເຂົາຈະລອດບໍ່ໄດ້; ສະນັ້ນ ເພາະເຫດນີ້, ເພື່ອມະນຸດຈະໄດ້ຮັບຄວາມລອດ ຈົ່ງມີ ປະກາດເລື່ອງການກັບໃຈ.

ຄ. ๘๙ ສະນັ້ນ, ຄົນທີ່ກັບໃຈ ແລະ ເຊື່ອຟັງສຸລະສຽງຂອງພຣະຜູ້ ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາຍ່ອມເປັນສຸກ; ເພາະ ຜູ້ຄົນເຫລົ່ານີ້ຄືພວກທີ່ຈະໄດ້ຮັບ ຄວາມລອດ.

ຄ. ๙๐ ແລະ ຂໍພຣະເຈົ້າໂປດປະທານໃນຄວາມບໍລິບູນອັນຍິ່ງໃຫຍ່ ຂອງພຣະອົງ ເພື່ອມະນຸດຈະຖືກນຳມາສູ່ການກັບໃຈ ແລະ ວຽກງານດີ, ເພື່ອພວກເຂົາຈະໄດ້ຖືກນຳກັບຄືນສູ່ ພຣະຄຸນ ເພື່ອພຣະຄຸນ, ຕາມວຽກງານຂອງພວກເຂົາ.

ຄ. ๙๑ ແລະ ຂ້າພະເຈົ້າຢາກໃຫ້ທຸກຄົນໄດ້ຮັບຄວາມລອດ. ແຕ່ ພວກເຮົາໄດ້ອ່ານມາว่า ໃນວັນສຸດທ້າຍ ແລະ ຍິ່ງໃຫຍ່ນັ້ນ ຈະມີ ບາງຄົນທີ່ຖືກຂັບໄລ່ອອກໄປ, ແທ້ຈິງແລ້ວ, ຈະຖືກປະຖິ້ມຈາກ ທີ່ປະທັບຂອງພຣະຜູ້ເປັນເຈົ້າ;

ຄ. ๙๒ ແທ້ຈິງແລ້ວ, ຈະຖືກສົ່ງໄປຫາສະພາບແຫ່ງຄວາມທຸກ ທໍລະມານອັນບໍ່ມີວັນສິ້ນສຸດຕາມຄຳທີ່ມີເວົ້າໄວ້ວ່າ: ຜູ້ທີ່ສ້າງ ຄວາມດີຈະມີ ຊີວິດອັນເປັນນິດ; ແລະ ຜູ້ທີ່ສ້າງຄວາມຊົ່ວຈະໄດ້ ຮັບ ຄວາມອັບປະໂຫຍດອັນເປັນນິດ. ແລະ ເປັນໄປດັ່ງນັ້ນ. ອາແມນ.

And behold, if a man hide up a treasure in the earth, and the Lord shall say—Let it be accursed, because of the iniquity of him who hath hid it up—behold, it shall be accursed.

And if the Lord shall say—Be thou accursed, that no man shall find thee from this time henceforth and forever—behold, no man getteth it henceforth and forever.

And behold, if the Lord shall say unto a man—Because of thine iniquities, thou shalt be accursed forever—it shall be done.

And if the Lord shall say—Because of thine iniquities thou shalt be cut off from my presence—he will cause that it shall be so.

And wo unto him to whom he shall say this, for it shall be unto him that will do iniquity, and he cannot be saved; therefore, for this cause, that men might be saved, hath repentance been declared.

Therefore, blessed are they who will repent and hearken unto the voice of the Lord their God; for these are they that shall be saved.

And may God grant, in his great fulness, that men might be brought unto repentance and good works, that they might be restored unto grace for grace, according to their works.

And I would that all men might be saved. But we read that in the great and last day there are some who shall be cast out, yea, who shall be cast off from the presence of the Lord;

Yea, who shall be consigned to a state of endless misery, fulfilling the words which say: They that have done good shall have everlasting life; and they that have done evil shall have everlasting damnation. And thus it is. Amen.

ຄຳທຳນາຍຂອງຊາມູເອນຄົນເລມັນທີ່ໃຫ້ໄວ້ກັບຊາວນີໄຟ.

ຮີລາມັນ ๑ມ

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນປີທີແປດສິບຫົກ, ຊາວນີ
ໄຟຍັງຢູ່ໃນຄວາມຊົ່ວຮ້າຍຢູ່, ແທ້ຈິງແລ້ວ, ຍັງຢູ່ໃນຄວາມ
ຊົ່ວຮ້າຍອັນໃຫຍ່ຫລວງ, ໃນຂະນະທີ່ ຊາວເລມັນໄດ້ປະຕິບັດ
ຢ່າງເຄັ່ງຄັດໃນການຮັກສາພຣະບັນຍັດຂອງພຣະເຈົ້າຕາມກົດ
ຂອງໂມເຊ.

๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີນີ້ມີຊາວເລມັນຄົນໜຶ່ງ
ຊື່ວ່າ ຊາມູເອນ, ເຂົ້າມາໃນແຜ່ນດິນເຊຣາເຮັມລາ ແລະ ເລີ່ມ
ສັ່ງສອນຜູ້ຄົນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ເພິ່ນໄດ້
ສັ່ງສອນກ່ຽວກັບການກັບໃຈໃຫ້ແກ່ຜູ້ຄົນຢູ່ຫລາຍມື້, ແລະ
ພວກເຂົາໄດ້ຂັບໄລ່ເພິ່ນອອກໄປ, ແລະ ເພິ່ນກຳລັງຈະກັບໄປ
ຫາແຜ່ນດິນຂອງເພິ່ນເອງ.

๓ ແຕ່ຈົ່ງເບິ່ງ, ສຸລະສຽງຂອງພຣະຜູ້ເປັນເຈົ້າໄດ້ມາເຖິງເພິ່ນ,
ວ່າເພິ່ນຄວນກັບຄືນໄປອີກ ແລະ ທຳນາຍແກ່ຜູ້ຄົນເຖິງເລື່ອງ
ອັນໃດກໍຕາມທີ່ຈະເຂົ້າມາໃນ ໃຈຂອງເພິ່ນ.

๔ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາບໍ່ຍອມໃຫ້ເພິ່ນ
ເຂົ້າເມືອງ; ສະນັ້ນ ເພິ່ນຈຶ່ງອອກໄປ ແລະ ຂຶ້ນເທິງກຳແພງ
ເມືອງນັ້ນ ແລະ ເດ່ມືອອກໄປ ແລະ ຮ້ອງອອກມາດ້ວຍສຽງອັນ
ດັງ ແລະ ທຳນາຍແກ່ຜູ້ຄົນເຖິງເລື່ອງທີ່ພຣະຜູ້ເປັນເຈົ້າໃສ່ໄວ້
ໃນໃຈຂອງເພິ່ນ.

๕ ແລະ ເພິ່ນໄດ້ກ່າວກັບພວກເຂົາວ່າ: ຈົ່ງເບິ່ງຂ້າພະເຈົ້າ
ຊາມູເອນເປັນຊາວເລມັນ, ຂໍເວົ້າເຖິງພຣະຄຳຂອງພຣະຜູ້ເປັນ
ເຈົ້າ ຊຶ່ງພຣະອົງໄດ້ໃສ່ໄວ້ໃນໃຈຂອງຂ້າພະເຈົ້າ; ແລະ ຈົ່ງເບິ່ງ
ພຣະອົງໄດ້ໃສ່ມັນໄວ້ໃນໃຈຂອງຂ້າພະເຈົ້າ ເພື່ອໃຫ້ກ່າວກັບ
ຜູ້ຄົນພວກນີ້ວ່າ ດາບແຫ່ງຄວາມຍຸດຕິທຳກຳລັງຫ້ອຍຢູ່ເທິງ
ຫົວຂອງຜູ້ຄົນພວກນີ້; ແລະ ກ່ອນສີ່ຮ້ອຍປີຈະຜ່ານໄປ, ດາບ
ແຫ່ງຄວາມຍຸດຕິທຳຈະຕົກລົງມາໃສ່ຜູ້ຄົນພວກນີ້.

๖ ແທ້ຈິງແລ້ວ, ຄວາມພິນາດຢ່າງໃຫຍ່ຫລວງໄດ້ຄອຍຖ້າ
ຜູ້ຄົນພວກນີ້ຢູ່, ແລະ ມັນຈະມາຫາຜູ້ຄົນພວກນີ້ຢ່າງແນ່ນອນ
ແລະ ຈະບໍ່ມີສິ່ງໃດຈະຊ່ວຍໃຫ້ຜູ້ຄົນພວກນີ້ລອດໄດ້ນອກຈາກ
ການກັບໃຈ ແລະ ສັດທາໃນອົງພຣະເຢຊູຄຣິດເຈົ້າ, ຜູ້ຈະ
ສະເດັດມາໃນໂລກຢ່າງແນ່ນອນ, ແລະ ຈະທົນທຸກທໍລະມານ
ຫລາຍຢ່າງ ແລະ ຈະຖືກຂ້າເພື່ອຜູ້ຄົນຂອງພຣະອົງ.

The prophecy of Samuel, the Lamanite, to the Nephites.

Helaman 13

And now it came to pass in the eighty and sixth year, the Nephites did still remain in wickedness, yea, in great wickedness, while the Lamanites did observe strictly to keep the commandments of God, according to the law of Moses.

And it came to pass that in this year there was one Samuel, a Lamanite, came into the land of Zarahemla, and began to preach unto the people. And it came to pass that he did preach, many days, repentance unto the people, and they did cast him out, and he was about to return to his own land.

But behold, the voice of the Lord came unto him, that he should return again, and prophesy unto the people whatsoever things should come into his heart.

And it came to pass that they would not suffer that he should enter into the city; therefore he went and got upon the wall thereof, and stretched forth his hand and cried with a loud voice, and prophesied unto the people whatsoever things the Lord put into his heart.

And he said unto them: Behold, I, Samuel, a Lamanite, do speak the words of the Lord which he doth put into my heart; and behold he hath put it into my heart to say unto this people that the sword of justice hangeth over this people; and four hundred years pass not away save the sword of justice falleth upon this people.

Yea, heavy destruction awaiteth this people, and it surely cometh unto this people, and nothing can save this people save it be repentance and faith on the Lord Jesus Christ, who surely shall come into the world, and shall suffer many things and shall be slain for his people.

ᄀᄂ ແລະ ຈົ່ງເບິ່ງ, ທູດຂອງພຣະຜູ້ເປັນເຈົ້າໄດ້ປະກາດເລື່ອງນີ້ ແກ່ຂ້າພະເຈົ້າ, ແລະ ເພີ່ນໄດ້ນຳຂ່າວ ອັນໜ້າຊື່ນຊົມມາສູ່ ຈິດວິນຍານຂອງຂ້າພະເຈົ້າ. ແລະ ຈົ່ງເບິ່ງ, ຂ້າພະເຈົ້າຖືກສົ່ງມາ ຫາພວກທ່ານ ແລະ ປະກາດແກ່ພວກທ່ານນຳອີກ, ເພື່ອພວກ ທ່ານຈະໄດ້ຮັບຂ່າວອັນໜ້າຊື່ນຊົມນີ້; ແຕ່ຈົ່ງເບິ່ງ ພວກທ່ານບໍ່ ຍອມຮັບຂ້າພະເຈົ້າເລີຍ.

ᄀᄃ ສະນັ້ນ, ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້: ເພາະຄວາມແຂງ ກະດ້າງຂອງໃຈຂອງຜູ້ຄົນຊາວນີໄຟ, ຖ້າຫາກພວກເຂົາບໍ່ກັບ ໃຈ ເຮົາຈະເອົາພຣະຄຳຂອງເຮົາໄປຈາກພວກເຂົາ, ແລະ ເຮົາຈະ ຖອນພຣະວິນຍານຂອງເຮົາອອກຈາກພວກເຂົາ, ແລະ ເຮົາຈະ ບໍ່ອົດທົນກັບພວກເຂົາຕໍ່ໄປອີກ, ແລະ ເຮົາຈະຫັນໃຈຂອງ ພີ່ນ້ອງຂອງພວກເຂົາມາຕໍ່ຕ້ານພວກເຂົາ.

ᄀᄅ ແລະ ກ່ອນ ສີ່ຮ້ອຍປີຈະຜ່ານໄປ ເຮົາຈະເຮັດໃຫ້ພວກເຂົາຖືກ ລົງໂທດ; ແທ້ຈິງແລ້ວ, ເຮົາຈະມາຢ້ຽມຢາມພວກເຂົາດ້ວຍດາບ ແລະ ດ້ວຍຄວາມອຶດຢາກ ແລະ ດ້ວຍພະຍາດໂລຄາ.

ᄀᄆ ແທ້ຈິງແລ້ວ, ເຮົາຈະມາຢ້ຽມຢາມພວກເຂົາໃນພຣະພິໂລດ ອັນຮ້າຍແຮງຂອງເຮົາ, ແລະ ຄົນລຸ້ນ ທີສີ່ ຜູ້ທີ່ເປັນສັດຕູຂອງ ພວກເຈົ້າຈະມີຊີວິດຢູ່, ເພື່ອພວກເຂົາຈະໄດ້ເຫັນຄວາມພິນາດ ທັງໝົດຂອງພວກເຈົ້າ; ແລະ ສິ່ງນີ້ຈະເກີດຂຶ້ນຢ່າງແນ່ນອນຖ້າ ຫາກພວກເຈົ້າບໍ່ກັບໃຈ, ພຣະຜູ້ເປັນເຈົ້າໄດ້ກ່າວ; ແລະ ຄົນລຸ້ນ ທີສີ່ຈະເຫັນຄວາມພິນາດຂອງພວກເຈົ້າ.

ᄀᄇ ແຕ່ຖ້າຫາກພວກເຈົ້າກັບໃຈ ແລະ ຫັນມາຫາພຣະຜູ້ເປັນ ເຈົ້າອົງເປັນພຣະເຈົ້າຂອງພວກເຈົ້າ ເຮົາຈະເອົາພຣະພິໂລດ ຂອງເຮົາໄປ, ພຣະຜູ້ເປັນເຈົ້າໄດ້ກ່າວ; ແທ້ຈິງແລ້ວ, ພຣະຜູ້ເປັນ ເຈົ້າໄດ້ກ່າວດັ່ງນີ້, ຜູ້ທີ່ກັບໃຈ ແລະ ຫັນມາຫາເຮົາຍ່ອມເປັນ ສຸກ, ແຕ່ວິບັດແກ່ຜູ້ທີ່ບໍ່ກັບໃຈ.

ᄀᄈ ແທ້ຈິງແລ້ວ, ວິບັດແກ່ເມືອງເຊຣາເຮັມລາທີ່ຍິ່ງໃຫຍ່ນີ້; ເພາະຈົ່ງເບິ່ງ, ເພາະຄົນຊອບທຳມັນຈົ່ງຖືກຍົກເວັ້ນ; ແທ້ຈິງ ແລ້ວ, ວິບັດແກ່ເມືອງຍິ່ງໃຫຍ່ນີ້, ພຣະຜູ້ເປັນເຈົ້າໄດ້ກ່າວ, ເພາະເຮົາເຫັນວ່າມີຢູ່ຢ່າງຫລວງຫລາຍ, ແທ້ຈິງແລ້ວ, ຄົນ ສ່ວນຫລາຍຂອງເມືອງຍິ່ງໃຫຍ່ນີ້ທີ່ຈະເຮັດໃຈແຂງກະດ້າງຕໍ່ ເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ.

ᄀᄉ ແຕ່ຄົນທີ່ຈະກັບໃຈຍ່ອມເປັນສຸກ, ເປັນຍ້ອນພວກເຂົາ ເຮົາ ຈົ່ງຈະຍົກເວັ້ນ. ແຕ່ຈົ່ງເບິ່ງ, ຖ້າຫາກບໍ່ແມ່ນເພາະຄົນຊອບທຳ ທີ່ຢູ່ໃນເມືອງຍິ່ງໃຫຍ່ນີ້, ຈົ່ງເບິ່ງ, ເຮົາຈະໃຫ້ ໄຟລົງມາຈາກ ສະຫວັນ ແລະ ທຳລາຍມັນເສຍ.

And behold, an angel of the Lord hath declared it unto me, and he did bring glad tidings to my soul. And behold, I was sent unto you to declare it unto you also, that ye might have glad tidings; but behold ye would not receive me.

Therefore, thus saith the Lord: Because of the hardness of the hearts of the people of the Nephites, except they repent I will take away my word from them, and I will withdraw my Spirit from them, and I will suffer them no longer, and I will turn the hearts of their brethren against them.

And four hundred years shall not pass away before I will cause that they shall be smitten; yea, I will visit them with the sword and with famine and with pestilence.

Yea, I will visit them in my fierce anger, and there shall be those of the fourth generation who shall live, of your enemies, to behold your utter destruction; and this shall surely come except ye repent, saith the Lord; and those of the fourth generation shall visit your destruction.

But if ye will repent and return unto the Lord your God I will turn away mine anger, saith the Lord; yea, thus saith the Lord, blessed are they who will repent and turn unto me, but wo unto him that repenteth not.

Yea, wo unto this great city of Zarahemla; for behold, it is because of those who are righteous that it is saved; yea, wo unto this great city, for I perceive, saith the Lord, that there are many, yea, even the more part of this great city, that will harden their hearts against me, saith the Lord.

But blessed are they who will repent, for them will I spare. But behold, if it were not for the righteous who are in this great city, behold, I would cause that fire should come down out of heaven and destroy it.

ແຕ່ຈົ່ງເບິ່ງ, ເພື່ອເຫັນແກ່ຄົນຊອບທຳ ມັນຈຶ່ງໄດ້ຮັບການ ຍົກເວັ້ນ. ແຕ່ຈົ່ງເບິ່ງ, ພຣະຜູ້ເປັນເจ້າໄດ້ກ່າວ, ວ່າເວລາຈະ ມາເຖິງ ເມື່ອໃດພວກເจ້າຈະຂັບໄລ່ຄົນຊອບທຳອອກຈາກ ບັນດາພວກເจ້າ, ເມື່ອນັ້ນພວກເจ້າຈະສຸກເພື່ອຄວາມພິນາດ; ແທ້ຈິງແລ້ວ, ວິບັດແກ່ເມືອງຍິ່ງໃຫຍ່ນີ້ ເພາະຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຊຶ່ງມີຢູ່ໃນນັ້ນ.

But behold, it is for the righteous' sake that it is spared. But behold, the time cometh, saith the Lord, that when ye shall cast out the righteous from among you, then shall ye be ripe for destruction; yea, wo be unto this great city, because of the wickedness and abominations which are in her.

ແທ້ຈິງແລ້ວ, ແລະ ວິບັດແກ່ເມືອງກີເດໂອນ, ເພາະຄວາມ ຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຊຶ່ງມີຢູ່ໃນນັ້ນ.

Yea, and wo be unto the city of Gideon, for the wickedness and abominations which are in her.

ແທ້ຈິງແລ້ວ, ແລະ ວິບັດແກ່ເມືອງທັງໝົດ ຊຶ່ງຢູ່ໃນແຜ່ນດິນ ໂດຍຮອບ, ທີ່ຊາວນີໄຟເປັນເจ້າຂອງ ເພາະຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງທີ່ມີຢູ່ໃນນັ້ນ.

Yea, and wo be unto all the cities which are in the land round about, which are possessed by the Nephites, because of the wickedness and abominations which are in them.

ແລະ ຈົ່ງເບິ່ງ, ແຜ່ນດິນຈະຖືກ ສາບແຊ່ງ, ຈອມໂຍທາໄດ້ ກ່າວ, ເພາະເຫັນແກ່ຜູ້ຄົນທີ່ຢູ່ເທິງແຜ່ນດິນ, ແທ້ຈິງແລ້ວ, ເພາະຄວາມຊົ່ວຮ້າຍຂອງພວກເຂົາ ແລະ ຄວາມໜ້າກຽດຊັງ ຂອງພວກເຂົາ.

And behold, a curse shall come upon the land, saith the Lord of Hosts, because of the people's sake who are upon the land, yea, because of their wickedness and their abominations.

ແລະ ເຫດການຈະບັງເກີດຂຶ້ນ, ຈອມໂຍທາໄດ້ກ່າວ, ແທ້ຈິງ ແລ້ວ, ພຣະເจ້າອົງຍິ່ງໃຫຍ່ ແລະ ແທ້ຈິງຂອງພວກເຮົາໄດ້ກ່າວ ວ່າ ຜູ້ທີ່ ເຊື່ອງຊັບສົມບັດໄວ້ໃນແຜ່ນດິນຈະຫາມັນບໍ່ພົບ ອີກເລີຍ ເພາະການສາບແຊ່ງອັນໃຫຍ່ຫລວງທີ່ມີກັບແຜ່ນດິນ, ຍົກເວັ້ນແຕ່ຄົນຊອບທຳຜູ້ທີ່ເຊື່ອງຊັບສົມຂອງພວກເຂົາໄວ້ກັບ ພຣະຜູ້ເປັນເจ້າເທົ່ານັ້ນ.

And it shall come to pass, saith the Lord of Hosts, yea, our great and true God, that whoso shall hide up treasures in the earth shall find them again no more, because of the great curse of the land, save he be a righteous man and shall hide it up unto the Lord.

ເພາະເຮົາຈະ, ພຣະຜູ້ເປັນເจ້າໄດ້ກ່າວ, ວ່າເຮົາຢາກໃຫ້ພວກ ເຂົາເຊື່ອງຊັບສົມບັດຂອງພວກເຂົາໄວ້ກັບເຮົາ; ແລະ ຄົນທີ່ບໍ່ ເຊື່ອງຊັບສົມບັດຂອງພວກເຂົາໄວ້ກັບເຮົາຈະຖືກສາບແຊ່ງ ເພາະບໍ່ມີຜູ້ໃດທີ່ຈະເຊື່ອງຊັບສົມບັດຂອງຕົນໄວ້ກັບເຮົາ ນອກຈາກຄົນທີ່ຊອບທຳເທົ່ານັ້ນ; ແລະ ຄົນທີ່ບໍ່ໄດ້ເຊື່ອງ ຊັບສົມບັດຂອງເຂົາໄວ້ກັບເຮົາຈະຖືກສາບແຊ່ງ ແລະ ຊັບສົມບັດກໍຄືກັນ, ແລະ ບໍ່ມີຜູ້ໃດຈະໄຖ່ມັນຄືນມາເພາະຄຳ ສາບແຊ່ງທີ່ມີກັບແຜ່ນດິນ.

For I will, saith the Lord, that they shall hide up their treasures unto me; and cursed be they who hide not up their treasures unto me; for none hideth up their treasures unto me save it be the righteous; and he that hideth not up his treasures unto me, cursed is he, and also the treasure, and none shall redeem it because of the curse of the land.

ແລະ ມື້ນັ້ນຈະມາເຖິງຄື ພວກເຂົາຈະເຊື່ອງຊັບສົມບັດຂອງ ພວກເຂົາໄວ້ ເພາະພວກເຂົາມີແຕ່ໝົກໝຸ້ນຢູ່ກັບຂອງມີຄ່າ; ແລະ ເພາະພວກເຂົາມີແຕ່ໝົກໝຸ້ນຢູ່ກັບຂອງມີຄ່າຂອງພວກ ເຂົາ, ແລະ ຈະເຊື່ອງຊັບສົມບັດຂອງພວກເຂົາໄວ້ໃນເວລາທີ່ ພວກເຂົາຫລົບໜີໄປຈາກສັດຕູຂອງພວກເຂົາ; ເພາະພວກເຂົາ ຈະບໍ່ໄດ້ເຊື່ອງຊັບສົມບັດຂອງພວກເຂົາໄວ້ກັບເຮົາ, ພວກເຂົາ ຈະຖືກສາບແຊ່ງ ແລະ ຊັບສົມບັດຂອງພວກເຂົາກໍຄືກັນ, ແລະ ໃນມື້ນັ້ນ ພວກເຂົາຈະຖືກລົງໂທດ, ພຣະຜູ້ເປັນເจ้າໄດ້ກ່າວ.

And the day shall come that they shall hide up their treasures, because they have set their hearts upon riches; and because they have set their hearts upon their riches, and will hide up their treasures when they shall flee before their enemies; because they will not hide them up unto me, cursed be they and also their treasures; and in that day shall they be smitten, saith the Lord.

Behold ye, the people of this great city, and hearken unto my words; yea, hearken unto the words which the Lord saith; for behold, he saith that ye are cursed because of your riches, and also are your riches cursed because ye have set your hearts upon them, and have not hearkened unto the words of him who gave them unto you.

Ye do not remember the Lord your God in the things with which he hath blessed you, but ye do always remember your riches, not to thank the Lord your God for them; yea, your hearts are not drawn out unto the Lord, but they do swell with great pride, unto boasting, and unto great swelling, envyings, strifes, malice, persecutions, and murders, and all manner of iniquities.

For this cause hath the Lord God caused that a curse should come upon the land, and also upon your riches, and this because of your iniquities.

Yea, wo unto this people, because of this time which has arrived, that ye do cast out the prophets, and do mock them, and cast stones at them, and do slay them, and do all manner of iniquity unto them, even as they did of old time.

And now when ye talk, ye say: If our days had been in the days of our fathers of old, we would not have slain the prophets; we would not have stoned them, and cast them out.

Behold ye are worse than they; for as the Lord liveth, if a prophet come among you and declareth unto you the word of the Lord, which testifieth of your sins and iniquities, ye are angry with him, and cast him out and seek all manner of ways to destroy him; yea, you will say that he is a false prophet, and that he is a sinner, and of the devil, because he testifieth that your deeds are evil.

ຄ ຈົ່ງເບິ່ງ ພວກທ່ານຜູ້ເປັນຜູ້ຄົນຂອງເມືອງຍິ່ງໃຫຍ່ນີ້, ແລະ ຈົ່ງ ເຊື່ອຟັງຄຳເວົ້າຂອງຂ້າພະເຈົ້າເຖີດ; ແທ້ຈິງແລ້ວ, ຈົ່ງ ເຊື່ອຟັງພຣະຄຳຊຶ່ງພຣະຜູ້ເປັນເຈົ້າໄດ້ກ່າວໄວ້; ເພາະຈົ່ງເບິ່ງ, ພຣະອົງໄດ້ກ່າວວ່າ ພວກທ່ານຈະຖືກສາບແຊ່ງ ເພາະຂອງ ມີຄ່າຂອງພວກທ່ານ, ແລະ ຂອງມີຄ່າຂອງພວກທ່ານຈະຖືກ ສາບແຊ່ງນຳອີກ ເພາະພວກທ່ານໝົກໝຸ້ນຢູ່ກັບມັນ, ແລະ ບໍ່ ເຊື່ອຟັງພຣະຄຳຂອງພຣະອົງຜູ້ປະທານມັນໃຫ້ແກ່ພວກທ່ານ.

ຄ ພວກທ່ານບໍ່ຈື່ຈຳພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງ ພວກທ່ານໃນສິ່ງທີ່ພຣະອົງປະທານໃຫ້ແກ່ພວກທ່ານ, ແຕ່ ພວກທ່ານຈື່ຈຳ ຂອງມີຄ່າຂອງພວກທ່ານຢູ່ຕະຫລອດເວລາ ແລະ ບໍ່ຖວາຍຄວາມຂອບພຣະໄທແດ່ພຣະຜູ້ເປັນເຈົ້າອົງເປັນ ພຣະເຈົ້າຂອງພວກທ່ານສຳລັບສິ່ງເຫລົ່ານັ້ນ; ແທ້ຈິງແລ້ວ, ໃຈ ຂອງພວກທ່ານບໍ່ໄດ້ອອກມາຫາພຣະຜູ້ເປັນເຈົ້າ, ແຕ່ມັນໄດ້ ພອງຂຶ້ນດ້ວຍ ຄວາມທະນົງຕົວອັນໃຫຍ່ຫລວງ, ຈົນເຖິງການ ອວດອ້າງ ແລະ ຈົນເຖິງການທະເຍີທະຍານ, ການອິດສາ ບ້ຽບຽດ, ການຜິດຖຽງກັນ, ການມີເຈດຕະນາຮ້າຍ, ການກົດຂີ່ ຂົ່ມເຫັງ, ແລະ ການຄາດຕະກຳ, ແລະ ການເຮັດຄວາມຊົ່ວຮ້າຍ ນາໆປະການ.

ຄ ດ້ວຍເຫດນີ້ ອົງພຣະຜູ້ເປັນເຈົ້າຈົ່ງໃຫ້ການສາບແຊ່ງມາສູ່ ແຜ່ນດິນ ແລະ ມາສູ່ຂອງມີຄ່າຂອງພວກທ່ານນຳອີກ, ແລະ ນີ້ ເພາະຄວາມຊົ່ວຮ້າຍຂອງພວກທ່ານ.

ຄ ແທ້ຈິງແລ້ວ, ວິບັດແກ່ຜູ້ຄົນພວກນີ້, ເພາະເວລານີ້ຊຶ່ງ ມາເຖິງແລ້ວ, ທີ່ພວກທ່ານໄດ້ ຂັບໄລ່ສາດສະດາອອກໄປ, ແລະ ເຍາະເຍີ້ຍພວກເພີ່ນ, ແລະ ແກວ່ງກ້ອນຫີນໃສ່ພວກເພີ່ນ, ແລະ ໄລ່ຂ້າພວກເພີ່ນ, ແລະ ເຮັດຄວາມຊົ່ວຮ້າຍນາໆປະການຕໍ່ ພວກເພີ່ນ ຄືກັນກັບຜູ້ຄົນໃນສະໄໝບູຮານເຮັດໄປນັ້ນ.

ຄ ແລະ ບັດນີ້ເວລາພວກທ່ານເວົ້າອອກມາ, ພວກທ່ານເວົ້າວ່າ: ຖ້າຫາກພວກເຮົາມີຊີວິດຢູ່ໃນສະໄໝຂອງ ບັນພະບຸລຸດຂອງ ພວກເຮົາ, ພວກເຮົາຈະບໍ່ຂ້າສາດສະດາ; ພວກເຮົາຈະບໍ່ແກວ່ງ ກ້ອນຫີນໃສ່ພວກເພີ່ນ, ແລະ ຂັບໄລ່ພວກເພີ່ນອອກໄປ.

ຄ ຈົ່ງເບິ່ງ ພວກທ່ານຍິ່ງຊົ່ວຮ້າຍຫລາຍກວ່າພວກເຂົາອີກຊ້ຳ; ເພາະຕາບໃດທີ່ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່, ຖ້າຫາກ ສາດ ສະດາຄົນໃດມາໃນບັນດາພວກທ່ານ ແລະ ປະກາດພຣະຄຳ ຂອງພຣະຜູ້ເປັນເຈົ້າແກ່ພວກທ່ານ, ຊຶ່ງໃຫ້ຖ້ອຍຄຳເຖິງບາບ ແລະ ຄວາມຊົ່ວຮ້າຍຂອງພວກທ່ານ, ແລ້ວພວກທ່ານກໍ ໂມໂຫ ຮ້າຍຂຶ້ນ, ແລະ ຂັບໄລ່ເພີ່ນອອກໄປ, ແລະ ຊອກຫາທຸກວິທີທາງ ທີ່ຈະທຳລາຍເພີ່ນ; ແທ້ຈິງແລ້ວ, ພວກທ່ານຈະເວົ້າວ່າ ເພີ່ນ ເປັນ ສາດສະດາປອມ, ແລະ ວ່າເພີ່ນເປັນຄົນບາບ, ແລະ ເປັນ ຂອງມານ, ເພາະເພີ່ນໄດ້ ໃຫ້ຖ້ອຍຄຳວ່າ ການກະທຳຂອງພວກ ທ່ານຊົ່ວ.

ຄ໗ ແຕ່ຈົ່ງເບິ່ງ, ຖ້າຫາກມີຄົນໜຶ່ງເຂົ້າມາໃນບັນດາພວກທ່ານ ແລະ ເວົ້າວ່າ: ເຮັດແນວນີ້; ແລະ ຈະບໍ່ມີຄວາມຊົ່ວຮ້າຍ; ເຮັດແນວນັ້ນ ແລ້ວພວກທ່ານຈະບໍ່ຕ້ອງທົນທຸກ; ແທ້ຈິງແລ້ວ, ລາວຈະເວົ້າວ່າ: ຈົ່ງດຳເນີນໄປຕາມຄວາມຈອງຫອງຂອງໃຈຂອງພວກທ່ານເອງ; ແທ້ຈິງແລ້ວ, ຈົ່ງດຳເນີນໄປຕາມຄວາມຈອງຫອງຂອງຕາຂອງພວກທ່ານເອງ, ແລະ ຈົ່ງເຮັດສິ່ງໃດກໍຕາມ ຕາມຄວາມປາດຖະໜາຂອງໃຈຂອງພວກທ່ານ—ແລະ ຖ້າຫາກມີຄົນໃດເຂົ້າມາໃນບັນດາພວກທ່ານ ແລະ ເວົ້າແບບນີ້ ພວກທ່ານກໍຈະຮັບເອົາລາວ ແລະ ເວົ້າວ່າລາວເປັນ ສາດສະດາ.

But behold, if a man shall come among you and shall say: Do this, and there is no iniquity; do that and ye shall not suffer; yea, he will say: Walk after the pride of your own hearts; yea, walk after the pride of your eyes, and do whatsoever your heart desireth—and if a man shall come among you and say this, ye will receive him, and say that he is a prophet.

ຄ໘ ແທ້ຈິງແລ້ວ, ພວກທ່ານຈະຍົກລາວຂຶ້ນ, ແລະ ພວກທ່ານຈະມອບເຂົ້າຂອງ ຂອງພວກທ່ານໃຫ້ລາວ; ພວກທ່ານຈະມອບຄຳ ຂອງພວກທ່ານໃຫ້ລາວ, ແລະ ເງິນຂອງພວກທ່ານໃຫ້ລາວ, ແລະ ພວກທ່ານຈະຕົກແຕ່ງລາວດ້ວຍເສື້ອຜ້າທີ່ມີລາຄາແພງ ເພາະລາວໄດ້ ຍ້ອງຍໍພວກທ່ານ, ແລະ ຍ້ອນວ່າລາວເວົ້າໃນທາງ ທີ່ພວກທ່ານພໍໃຈ, ເວລານັ້ນພວກທ່ານຈະບໍ່ພົບຄວາມຜິດໃນ ລາວ.

Yea, ye will lift him up, and ye will give unto him of your substance; ye will give unto him of your gold, and of your silver, and ye will clothe him with costly apparel; and because he speaketh flattering words unto you, and he saith that all is well, then ye will not find fault with him.

ຄ໙ ໂອ້ ພວກທ່ານຜູ້ຄົນລຸ້ນທີ່ຊົ່ວ ແລະ ເສຍຄົນເອີຍ; ພວກທ່ານ ເປັນຄົນແຂງກະດ້າງ ແລະ ພວກທ່ານເປັນຄົນແຂງຄໍ, ພວກ ທ່ານຄິດວ່າພຣະຜູ້ເປັນເຈົ້າຈະອົດທົນກັບພວກທ່ານໄດ້ດົນ ປານໃດ? ແທ້ຈິງແລ້ວ, ພວກທ່ານຈະປ່ອຍຕົວໃຫ້ ຄົນໂງ່ ແລະ ຕາບອດນຳພາພວກທ່ານໄປດົນປານໃດ? ແທ້ຈິງແລ້ວ, ພວກ ທ່ານຈະ ເລືອກເອົາຄວາມມືດແທນ ຄວາມສະຫວ່າງໄປດົນ ປານໃດ?

O ye wicked and ye perverse generation; ye hardened and ye stiffnecked people, how long will ye suppose that the Lord will suffer you? Yea, how long will ye suffer yourselves to be led by foolish and blind guides? Yea, how long will ye choose darkness rather than light?

ມ໐ ແທ້ຈິງແລ້ວ, ຈົ່ງເບິ່ງ, ພຣະພິโລດຂອງພຣະຜູ້ເປັນເຈົ້າໄດ້ ເກີດກັບພວກທ່ານແລ້ວ; ຈົ່ງເບິ່ງ, ພຣະອົງໄດ້ສາບແຊ່ງ ແຜ່ນດິນ ເພາະຄວາມຊົ່ວຮ້າຍຂອງພວກທ່ານ.

Yea, behold, the anger of the Lord is already kindled against you; behold, he hath cursed the land because of your iniquity.

ມ໑ ແລະ ຈົ່ງເບິ່ງ, ເວລາມາເຖິງແລ້ວທີ່ພຣະອົງຈະສາບແຊ່ງ ຂອງມີຄ່າຂອງພວກທ່ານ, ເພື່ອໃຫ້ມັນ ມົ່ນຫລຸດໄປ, ເພື່ອ ພວກທ່ານຈະຍຶດມັນໄວ້ບໍ່ໄດ້; ແລະ ໃນມື້ແຫ່ງຄວາມຍາກຈົນ ຂອງພວກທ່ານ, ພວກທ່ານຈະບໍ່ສາມາດຮັກສາມັນໄວ້ໄດ້.

And behold, the time cometh that he curseth your riches, that they become slippery, that ye cannot hold them; and in the days of your poverty ye cannot retain them.

ມ໒ ແລະ ໃນມື້ແຫ່ງຄວາມຍາກຈົນຂອງພວກທ່ານ, ພວກທ່ານ ຈະຮ້ອງຫາພຣະຜູ້ເປັນເຈົ້າ; ແລະ ພວກທ່ານຈະຮ້ອງໄປໂດຍ ບໍ່ມີປະໂຫຍດ, ເພາະຄວາມເປົ່າປ່ຽວໄດ້ມາຫາພວກທ່ານແລ້ວ, ແລະ ຄວາມພິນາດຂອງພວກທ່ານນັ້ນກໍຈະມີຂຶ້ນຢ່າງ ແນ່ນອນ; ແລະ ໃນມື້ນັ້ນພວກທ່ານຈະຮ້ອງໄຫ້ ແລະ ຄວນຄາງ, ຈອມໂຍທາໄດ້ກ່າວ. ເວລານັ້ນພວກທ່ານຈະຄວນຄາງ ແລະ ເວົ້າວ່າ:

And in the days of your poverty ye shall cry unto the Lord; and in vain shall ye cry, for your desolation is already come upon you, and your destruction is made sure; and then shall ye weep and howl in that day, saith the Lord of Hosts. And then shall ye lament, and say:

ນ້ນ ໂອ້ ຖ້າຫາກພວກເຮົາໄດ້ກັບໃຈ, ແລະ ບໍ່ໄດ້ຂ້າສາດສະດາ, ແລະ ບໍ່ໄດ້ ແກວ່ງກ້ອນຫີນໃສ່ພວກເພີ່ນ, ແລະ ບໍ່ໄດ້ຂັບໄລ່ພວກເພີ່ນອອກໄປ. ແທ້ຈິງແລ້ວ, ໃນມື້ນັ້ນ ພວກທ່ານຈະກ່າວว່າ: ໂອ້ ຖ້າຫາກພວກເຮົາລະນึกເຖິງພຣະຜູ້ເປັນເจ້າອົງເປັນພຣະເจ້າຂອງພວກເຮົາໃນມື້ທີ່ພຣະອົງປະທານຂອງມີຄ່າໃຫ້ແກ່ພວກເຮົາ, ມັນກໍຄົງຈະບໍ່ມົ້ນຫລຸດໄປຈົນພວກເຮົາຕ້ອງສູນເສຍມັນ; ເພາະຈົ່ງເບິ່ງ, ຂອງມີຄ່າຂອງພວກເຮົາໄປຈາກພວກເຮົາແລ້ວ.

Behold, we lay a tool here and on the morrow it is gone; and behold, our swords are taken from us in the day we have sought them for battle.

ນ້ນ ຈົ່ງເບິ່ງ, ພວກເຮົາວາງເຄື່ອງມືໄວ້ບ່ອນນີ້ ແລະ ໃນມື້ຕໍ່ມາ ມັນໄດ້ຫາຍໄປ; ແລະ ຈົ່ງເບິ່ງ, ດາບຂອງພວກເຮົາກໍຫາຍໄປໃນມື້ທີ່ພວກເຮົາຊອກຫາມັນເພື່ອການສູ້ຮົບ.

Yea, we have hid up our treasures and they have slipped away from us, because of the curse of the land.

ນ້ນ ແທ້ຈິງແລ້ວ, ພວກເຮົາໄດ້ເຊື່ອງຊັບສົມບັດຂອງພວກເຮົາໄວ້ ແລະ ມັນໄດ້ມົ້ນຫລຸດໄປຈາກພວກເຮົາ ເພາະຄວາມສາບແຊ່ງທີ່ມີກັບແຜ່ນດິນ.

O that we had repented in the day that the word of the Lord came unto us; for behold the land is cursed, and all things are become slippery, and we cannot hold them.

ນ້ນ ໂອ້ ຖ້າຫາກພວກເຮົາໄດ້ກັບໃຈໃນມື້ທີ່ພຣະຄຳຂອງພຣະຜູ້ເປັນເจ້າມາເຖິງພວກເຮົາ; ເພາະຈົ່ງເບິ່ງ ແຜ່ນດິນໄດ້ຖືກສາບແຊ່ງແລ້ວ, ແລະ ທຸກສິ່ງທຸກຢ່າງກໍມົ້ນຫລຸດໄປ, ແລະ ພວກເຮົາບໍ່ສາມາດຈະຍຶດຖືມັນໄວ້ເລີຍ.

Behold, we are surrounded by demons, yea, we are encircled about by the angels of him who hath sought to destroy our souls. Behold, our iniquities are great. O Lord, canst thou not turn away thine anger from us? And this shall be your language in those days.

ນ້ນ ຈົ່ງເບິ່ງ, ພວກເຮົາຖືກປົດລ້ອມໄວ້ດ້ວຍວິນຍານຮ້າຍ, ແທ້ຈິງແລ້ວ, ພວກເຮົາຖືກປົດລ້ອມໄວ້ດ້ວຍບໍລິວານຂອງຜູ້ທີ່ພະຍາຍາມຈະທຳລາຍຈິດວິນຍານຂອງພວກເຮົາ. ຈົ່ງເບິ່ງ, ຄວາມຊົ່ວຮ້າຍຂອງພວກເຮົານັ້ນໃຫຍ່ຫລວງທີ່ສຸດ. ໂອ້ ພຣະຜູ້ເປັນເจ້າ, ພຣະອົງຈະບໍ່ເອົາພຣະພິ�โລດຂອງພຣະອົງໄປຈາກພວກຂ້ານ້ອຍແດ່ບໍ? ແລະ ນີ້ຈະເປັນຄຳເວົ້າຂອງພວກທ່ານໃນມື້ນັ້ນ.

But behold, your days of probation are past; ye have procrastinated the day of your salvation until it is everlastingly too late, and your destruction is made sure; yea, for ye have sought all the days of your lives for that which ye could not obtain; and ye have sought for happiness in doing iniquity, which thing is contrary to the nature of that righteousness which is in our great and Eternal Head.

ນ້ນ ແຕ່ຈົ່ງເບິ່ງ, ວັນເວລາແຫ່ງການທົດລອງຂອງພວກທ່ານໄດ້ຜ່ານໄປແລ້ວ; ພວກທ່ານໄດ້ ເລື່ອນວັນແຫ່ງຄວາມລອດຂອງພວກທ່ານ ຈົນວ່າມັນສາຍເກີນໄປຢ່າງເປັນນິດ, ແລະ ຄວາມພິນາດຂອງພວກທ່ານກໍແນ່ນອນແລ້ວ; ແທ້ຈິງແລ້ວ, ເພາະຕະຫລອດຊີວິດຂອງພວກທ່ານ, ພວກທ່ານມີແຕ່ສະແຫວງຫາສິ່ງທີ່ພວກທ່ານບໍ່ສາມາດຍຶດຖືມັນໄວ້; ແລະ ພວກທ່ານສະແຫວງຫາ ຄວາມສຸກໃນການສ້າງຄວາມຊົ່ວຮ້າຍ, ຊຶ່ງສິ່ງເຫລົ່ານີ້ກົງກັນຂ້າມກັບທຳມະຊາດຂອງຄວາມຊອບທຳ ຊຶ່ງມີຢູ່ໃນທັງສາມພຣະອົງຜູ້ຍິ່ງໃຫຍ່ ແລະ ເປັນນິລັນດອນຂອງພວກເຮົາ.

O ye people of the land, that ye would hear my words! And I pray that the anger of the Lord be turned away from you, and that ye would repent and be saved.

ນ້ນ ໂອ້ ຜູ້ຄົນຂອງແຜ່ນດິນເອີຍ, ຂໍໃຫ້ພວກທ່ານຈົ່ງຟັງຄຳເວົ້າຂອງຂ້າພະເจ້າເຖີດ! ແລະ ຂ້າພະເจ້າຂໍໃຫ້ພຣະພິโລດຂອງພຣະຜູ້ເປັນເจ້າຈົ່ງຫັນໜີໄປຈາກພວກທ່ານ, ແລະ ວ່າພວກທ່ານຈະກັບໃຈ ແລະ ລອດ.

ຮີລາມັນ ๑๔

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຊາມູເອນຄົນເລມັນໄດ້ ທຳນາຍອີກຫລາຍເລື່ອງຊຶ່ງຂຽນໄວ້ບໍ່ໄດ້.

๘ ແລະ ຈົ່ງເບິ່ງ, ເພີ່ນໄດ້ເວົ້າກັບພວກເຂົາວ່າ: ຈົ່ງເບິ່ງ, ຂ້າພະເຈົ້າຈະໃຫ້ເຄື່ອງໝາຍແກ່ພວກທ່ານ; ເພາະອີກຫ້າປີທີ່ ຈະມາເຖິງນີ້, ແລະ ຈົ່ງເບິ່ງ, ເວລານັ້ນພຣະບຸດຂອງພຣະເຈົ້າຈະ ສະເດັດມາເພື່ອໄຖ່ຄົນທັງປວງຜູ້ທີ່ເຊື່ອໃນພຣະນາມຂອງ ພຣະອົງ.

๙ ແລະ ຈົ່ງເບິ່ງ, ຂ້າພະເຈົ້າຈະໃຫ້ສິ່ງນີ້ແກ່ພວກທ່ານ ເພື່ອ ເປັນ ເຄື່ອງໝາຍຂອງການສະເດັດມາ; ເພາະຈົ່ງເບິ່ງ, ມັນຈະມີ ຄວາມແຈ້ງທີ່ສຸດໃນສະຫວັນ, ເຖິງຂະໜາດທີ່ໃນຄືນກ່ອນທີ່ ພຣະອົງຈະສະເດັດມານັ້ນ, ມັນຈະບໍ່ມີຄວາມມືດເລີຍ, ເຖິງ ຂະໜາດທີ່ມັນປະກົດແກ່ມະນຸດວ່າ ມັນເປັນກາງເວັນ.

๑๐ ສະນັ້ນ, ມັນຈະມີມື້ໜຶ່ງກັບຄືນໜຶ່ງ ແລະ ອີກມື້ໜຶ່ງ, ເບິ່ງຄື ກັບວ່າເປັນມື້ດຽວ ແລະ ບໍ່ມີກາງຄືນ; ແລະ ນີ້ຈະເປັນ ເຄື່ອງໝາຍແກ່ພວກທ່ານ; ເພາະວ່າພວກທ່ານຮູ້ຈັກເຖິງ ການຂຶ້ນຂອງດວງຕາເວັນ ແລະ ການຕົກຂອງມັນນຳອີກ; ສະນັ້ນ ພວກທ່ານຈະຮູ້ຈັກເຖິງຄວາມແນ່ນອນວ່າ ມັນຈະມີ ສອງມື້ກັບໜຶ່ງຄືນ ເຖິງຢ່າງໃດກໍຕາມ ຄືນນັ້ນຈະບໍ່ມີຄວາມມືດ ແລະ ມັນຈະເປັນຄືນກ່ອນທີ່ ພຣະອົງຈະກຳເນີດ.

๑๑ ແລະ ຈົ່ງເບິ່ງ, ມັນຈະມີ ດາວດວງໃໝ່ປະກົດຂຶ້ນ, ຊຶ່ງເປັນ ດາວທີ່ພວກທ່ານບໍ່ເຄີຍເຫັນມາກ່ອນ ແລະ ດາວດວງນີ້ຈະເປັນ ເຄື່ອງໝາຍແກ່ພວກທ່ານຄືກັນ.

๑๒ ແລະ ຈົ່ງເບິ່ງ ນີ້ຍັງບໍ່ໝົດ, ມັນຈະມີເຄື່ອງໝາຍ ແລະ ການ ແປກປະຫລາດຫລາຍຢ່າງໃນທ້ອງຟ້າ.

๑๓ ແລະ ເຫດການຈະບັງເກີດຂຶ້ນຄື ພວກທ່ານທຸກຄົນຈະແປກ ປະຫລາດໃຈ ແລະ ອັດສະຈັນໃຈຫລາຍ, ເຖິງຂະໜາດທີ່ພວກ ທ່ານຈະ ລົ້ມລົງຢູ່ກັບພື້ນດິນ.

๑๔ ແລະ ເຫດການຈະບັງເກີດຂຶ້ນຄື ຜູ້ໃດກໍຕາມທີ່ ເຊື່ອໃນ ພຣະບຸດຂອງພຣະເຈົ້າ, ຜູ້ນັ້ນຈະມີຊີວິດອັນເປັນນິດ.

๑๕ ແລະ ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ບັນຊາຂ້າພະເຈົ້າໂດຍທູດ ຂອງພຣະອົງ, ວ່າໃຫ້ຂ້າພະເຈົ້າມາບອກເລື່ອງນີ້ແກ່ພວກ ທ່ານ; ແທ້ຈິງແລ້ວ, ພຣະອົງໄດ້ບັນຊາໃຫ້ຂ້າພະເຈົ້າທຳນາຍ ເລື່ອງເຫລົ່ານີ້ແກ່ພວກທ່ານ; ແທ້ຈິງແລ້ວ, ພຣະອົງໄດ້ກ່າວ ກັບຂ້າພະເຈົ້າວ່າ: ຈົ່ງປ່າວປະກາດຕໍ່ຜູ້ຄົນພວກນີ້ວ່າ ຈົ່ງກັບໃຈ ແລະ ຖຽມທາງຂອງພຣະຜູ້ເປັນເຈົ້າ.

Helaman 14

And now it came to pass that Samuel, the Lamanite, did prophesy a great many more things which cannot be written.

And behold, he said unto them: Behold, I give unto you a sign; for five years more cometh, and behold, then cometh the Son of God to redeem all those who shall believe on his name.

And behold, this will I give unto you for a sign at the time of his coming; for behold, there shall be great lights in heaven, insomuch that in the night before he cometh there shall be no darkness, insomuch that it shall appear unto man as if it was day.

Therefore, there shall be one day and a night and a day, as if it were one day and there were no night; and this shall be unto you for a sign; for ye shall know of the rising of the sun and also of its setting; therefore they shall know of a surety that there shall be two days and a night; nevertheless the night shall not be darkened; and it shall be the night before he is born.

And behold, there shall a new star arise, such an one as ye never have beheld; and this also shall be a sign unto you.

And behold this is not all, there shall be many signs and wonders in heaven.

And it shall come to pass that ye shall all be amazed, and wonder, insomuch that ye shall fall to the earth.

And it shall come to pass that whosoever shall believe on the Son of God, the same shall have everlasting life.

And behold, thus hath the Lord commanded me, by his angel, that I should come and tell this thing unto you; yea, he hath commanded that I should prophesy these things unto you; yea, he hath said unto me: Cry unto this people, repent and prepare the way of the Lord.

๑๐	ແລະ ບັດນີ້, ເພາະຂ້າພະເຈົ້າເປັນຄົນເລມັນ, ແລະ ເວົ້າກັບພວກທ່ານມາແລ້ວເຖິງພຣະຄຳທີ່ພຣະເຈົ້າໄດ້ບັນຊາຂ້າພະເຈົ້າ, ແລະ ເພາະມັນໄດ້ຕຳນິພວກທ່ານຢ່າງຮຸນແຮງ, ພວກທ່ານຈຶ່ງຄຽດແຄ້ນໃຫ້ຂ້າພະເຈົ້າ ແລະ ພະຍາຍາມທີ່ຈະທຳລາຍຂ້າພະເຈົ້າ, ແລະ ໄດ້ ຂັບໄລ່ຂ້າພະເຈົ້າອອກໄປຈາກບັນດາພວກທ່ານ.	And now, because I am a Lamanite, and have spoken unto you the words which the Lord hath commanded me, and because it was hard against you, ye are angry with me and do seek to destroy me, and have cast me out from among you.
๑๑	ແລະ ຂໍໃຫ້ພວກທ່ານຈົ່ງຟັງຄຳເວົ້າຂອງຂ້າພະເຈົ້າກ່ອນເຖີດ, ເພາະວ່າດ້ວຍເຈດຕະນານີ້ ຂ້າພະເຈົ້າຈຶ່ງໄດ້ຂຶ້ນມາເທິງກຳແພງເມືອງນີ້, ເພື່ອພວກທ່ານຈະໄດ້ຍິນ ແລະ ຮູ້ເຖິງການພິພາກສາຂອງພຣະເຈົ້າ ຊຶ່ງຄອຍຖ້າພວກທ່ານຢູ່ ເພາະຄວາມຊົ່ວຮ້າຍຂອງພວກທ່ານ, ແລະ ເພື່ອວ່າພວກທ່ານຈະໄດ້ຮູ້ເຖິງເງື່ອນໄຂຂອງການກັບໃຈນຳອີກ.	And ye shall hear my words, for, for this intent have I come up upon the walls of this city, that ye might hear and know of the judgments of God which do await you because of your iniquities, and also that ye might know the conditions of repentance;
๑๒	ແລະ ເພື່ອວ່າພວກທ່ານຈະໄດ້ຮູ້ຈັກເຖິງການສະເດັດມາຂອງພຣະເຢຊູຄຣິດນຳອີກ, ຜູ້ເປັນພຣະບຸດຂອງພຣະເຈົ້າ, ຜູ້ເປັນພຣະບິດາຂອງສະຫວັນ ແລະ ຂອງແຜ່ນດິນໂລກ, ຜູ້ເປັນພຣະຜູ້ສ້າງສາລະພັດສິ່ງຕັ້ງແຕ່ຕົ້ນ; ແລະ ເພື່ອວ່າພວກທ່ານຈະໄດ້ຮູ້ເຖິງເຄື່ອງໝາຍຂອງການສະເດັດມາຂອງພຣະອົງ, ດ້ວຍເຈດຕະນານີ້ ພວກທ່ານຈະໄດ້ເຊື່ອໃນພຣະນາມຂອງພຣະອົງ.	And also that ye might know of the coming of Jesus Christ, the Son of God, the Father of heaven and of earth, the Creator of all things from the beginning; and that ye might know of the signs of his coming, to the intent that ye might believe on his name.
๑๓	ແລະ ຖ້າຫາກພວກທ່ານ ເຊື່ອໃນພຣະນາມຂອງພຣະອົງແລ້ວ, ພວກທ່ານຈະກັບໃຈຈາກບາບທັງໝົດຂອງພວກທ່ານ, ເພື່ອດ້ວຍເຫດນີ້ ພວກທ່ານຈະໄດ້ຮັບການປົດບາບໂດຍພຣະຄຸນຄວາມດີຂອງພຣະອົງ.	And if ye believe on his name ye will repent of all your sins, that thereby ye may have a remission of them through his merits.
๑๔	ແລະ ຈົ່ງເບິ່ງ, ອີກອັນໜຶ່ງ, ຂ້າພະເຈົ້າຈະໃຫ້ເຄື່ອງໝາຍອີກຢ່າງໜຶ່ງແກ່ພວກທ່ານ, ແທ້ຈິງແລ້ວ, ຄືເຄື່ອງໝາຍຂອງການສິ້ນພຣະຊົນຂອງພຣະອົງ.	And behold, again, another sign I give unto you, yea, a sign of his death.
๑๕	ເພາະຈົ່ງເບິ່ງ, ພຣະອົງຈະສິ້ນພຣະຊົນຢ່າງແນ່ນອນເພື່ອຄວາມລອດຈະມີຂຶ້ນ; ແທ້ຈິງແລ້ວ, ພຣະອົງເຫັນວ່າ ມັນຈຳເປັນ ແລະ ມັນເປັນການສົມຄວນທີ່ພຣະອົງຈະສິ້ນພຣະຊົນ, ເພື່ອເຮັດໃຫ້ເກີດ ການຟື້ນຄືນຊີວິດຂອງຄົນຕາຍ, ເພື່ອໂດຍການສິ້ນພຣະຊົນນີ້ ມະນຸດຈະຖືກນຳເຂົ້າມາຫາທີ່ປະທັບຂອງພຣະຜູ້ເປັນເຈົ້າ.	For behold, he surely must die that salvation may come; yea, it behooveth him and becometh expedient that he dieth, to bring to pass the resurrection of the dead, that thereby men may be brought into the presence of the Lord.
๑๖	ແທ້ຈິງແລ້ວ, ຈົ່ງເບິ່ງ, ການສິ້ນພຣະຊົນນີ້ຈະເຮັດໃຫ້ເກີດການຟື້ນຄືນຊີວິດ, ແລະ ໄຖ່ມະນຸດຊາດທັງປວງຈາກຄວາມຕາຍຄັ້ງທຳອິດ—ຊຶ່ງເປັນຄວາມຕາຍທາງວິນຍານ; ໂດຍ ການຕົກຂອງອາດາມ ມະນຸດຊາດທັງປວງຈຶ່ງຖືກ ຕັດອອກຈາກທີ່ປະທັບຂອງພຣະຜູ້ເປັນເຈົ້າ, ແລະ ຖືວ່າ ຕາຍແລ້ວ, ຊຶ່ງເປັນທັງທາງໂລກ ແລະ ທາງວິນຍານ.	Yea, behold, this death bringeth to pass the resurrection, and redeemeth all mankind from the first death—that spiritual death; for all mankind, by the fall of Adam being cut off from the presence of the Lord, are considered as dead, both as to things temporal and to things spiritual.
๑๗	ແຕ່ ຈົ່ງເບິ່ງ, ການຟື້ນຄືນພຣະຊົນຂອງພຣະຄຣິດ ໄຖ່ມະນຸດຊາດ, ແທ້ຈິງແລ້ວ, ເຖິງແມ່ນມະນຸດຊາດທັງປວງ, ແລະ ນຳພວກເຂົາກັບເຂົ້າໄປຫາທີ່ປະທັບຂອງພຣະຜູ້ເປັນເຈົ້າ.	But behold, the resurrection of Christ redeemeth mankind, yea, even all mankind, and bringeth them back into the presence of the Lord.

ແທ້ຈິງແລ້ວ, ແລະ ມັນເຮັດໃຫ້ເກີດເງື່ອນໄຂແຫ່ງການກັບ
ໃຈ, ຄືຜູ້ໃດກໍຕາມທີ່ກັບໃຈ ຜູ້ນັ້ນຍ່ອມບໍ່ຖືກໂຄ່ນລົງ ແລະ ໂຍນ
ເຂົ້າກອງໄຟ; ແຕ່ຜູ້ໃດກໍຕາມທີ່ບໍ່ກັບໃຈ ຜູ້ນັ້ນຍ່ອມຖືກໂຄ່ນລົງ
ແລະ ໂຍນເຂົ້າກອງໄຟ; ແລະ ຄວາມຕາຍທາງວິນຍານຈະ
ມາເຖິງພວກເຂົາອີກ, ແທ້ຈິງແລ້ວ, ຄືຄວາມຕາຍຄັ້ງທີສອງ,
ເພາະວ່າພວກເຂົາຖືກຕັດອອກໄປອີກຈາກສິ່ງທີ່ກ່ຽວຂ້ອງກັບ
ຄວາມຊອບທຳ.

Yea, and it bringeth to pass the condition of repentance, that whosoever repenteth the same is not hewn down and cast into the fire; but whosoever repenteth not is hewn down and cast into the fire; and there cometh upon them again a spiritual death, yea, a second death, for they are cut off again as to things pertaining to righteousness.

ສະນັ້ນ ພວກທ່ານຈົ່ງກັບໃຈ, ພວກທ່ານຈົ່ງກັບໃຈເຖີດ,
ເມື່ອພວກທ່ານຮູ້ຈັກເລື່ອງເຫລົ່ານີ້ແລ້ວ ແຕ່ບໍ່ປະຕິບັດຕາມ
ພວກທ່ານຈະປ່ອຍໃຫ້ຕົນເອງມາຢູ່ພາຍໃຕ້ການກ່າວໂທດ,
ແລະ ພວກທ່ານຈະຖືກນຳລົງໄປຫາຄວາມຕາຍຄັ້ງທີສອງນີ້.

Therefore repent ye, repent ye, lest by knowing these things and not doing them ye shall suffer yourselves to come under condemnation, and ye are brought down unto this second death.

ແຕ່ຈົ່ງເບິ່ງ, ຄືກັນກັບທີ່ຂ້າພະເຈົ້າໄດ້ກ່າວກັບພວກທ່ານມາ
ແລ້ວ, ກ່ຽວກັບ ເຄື່ອງໝາຍອີກຢ່າງໜຶ່ງ, ຄືເຄື່ອງໝາຍຂອງ
ການສິ້ນພຣະຊົນຂອງພຣະອົງ, ຈົ່ງເບິ່ງ, ໃນມື້ນັ້ນ ມື້ທີ່ພຣະອົງ
ຈະຮັບເອົາຄວາມຕາຍ, ດວງຕາເວັນຈະ ມືດດັບ ແລະ ບໍ່ໃຫ້
ຄວາມສະຫວ່າງຂອງມັນແກ່ພວກທ່ານ, ແລະ ດວງເດືອນກັບ
ດວງດາວນຳອີກ, ແລະ ມັນຈະບໍ່ມີຄວາມສະຫວ່າງໃນຜືນ
ແຜ່ນດິນນີ້ ນັບຕັ້ງແຕ່ເວລາທີ່ພຣະອົງຮັບເອົາຄວາມຕາຍໄປ
ຈົນເຖິງ ສາມມື້, ຈົນວ່າເຖິງເວລາທີ່ພຣະອົງຈະລຸກຂຶ້ນອີກຈາກ
ຄວາມຕາຍ.

But behold, as I said unto you concerning another sign, a sign of his death, behold, in that day that he shall suffer death the sun shall be darkened and refuse to give his light unto you; and also the moon and the stars; and there shall be no light upon the face of this land, even from the time that he shall suffer death, for the space of three days, to the time that he shall rise again from the dead.

ແທ້ຈິງແລ້ວ, ໃນເວລາທີ່ພຣະອົງຈະປ່ອຍຈິດວິນຍານຂຶ້ນໄປ
ມັນຈະມີ ຟ້າຮ້ອງ ແລະ ຟ້າແມບເຫລື້ອມເປັນເວລາຫລາຍ
ຊົ່ວໂມງ ແລະ ແຜ່ນດິນຈະສັ່ນຫວັ່ນໄຫວ ແລະ ຫີນຊຶ່ງຢູ່ໃນ
ແຜ່ນດິນນີ້ ທີ່ຢູ່ທາງເທິງ ແລະ ທາງໃຕ້ໜ້າດິນຈະພັງທະລາຍ,
ຊຶ່ງພວກທ່ານຮູ້ຢູ່ແລ້ວວ່າ ໃນເວລານີ້ຫີນນັ້ນແຂງແກ່ນຊໍ່າໃດ,
ຫລື ແຜ່ນດິນທີ່ເປັນແຜ່ນອັນກວ້າງໃຫຍ່ຈະ ແຕກແຍກອອກ
ໄປ;

Yea, at the time that he shall yield up the ghost there shall be thunderings and lightnings for the space of many hours, and the earth shall shake and tremble; and the rocks which are upon the face of this earth, which are both above the earth and beneath, which ye know at this time are solid, or the more part of it is one solid mass, shall be broken up;

ແທ້ຈິງແລ້ວ, ມັນຈະແຍກອອກເປັນສອງ, ແລະ ນັບຕັ້ງແຕ່
ນັ້ນໄປ ຈະ ເຫັນເປັນຮ່ອງ ແລະ ຮອຍແຕກ, ແລະ ເປັນເສດ
ແຕກຫັກຢູ່ທົ່ວທັງແຜ່ນດິນໂລກ, ແທ້ຈິງແລ້ວ ທັງທາງເທິງ
ແລະ ທາງໃຕ້ໜ້າດິນ.

Yea, they shall be rent in twain, and shall ever after be found in seams and in cracks, and in broken fragments upon the face of the whole earth, yea, both above the earth and beneath.

ແລະ ຈົ່ງເບິ່ງ, ມັນຈະມີພະຍຸຝົນຟ້າຄະນອງໃຫຍ່, ແລະ
ພູຜາຫລາຍໜ່ວຍຈະພັງທະລາຍລົງເປັນຮ່ອມພູ, ແລະ ຈະມີ
ບ່ອນຫລາຍແຫ່ງຊຶ່ງດຽວນີ້ເອີ້ນກັນວ່າ ຮ່ອມພູຈະກັບເປັນ
ພູເຂົາ, ຊຶ່ງມີຄວາມສູງທີ່ສຸດ.

And behold, there shall be great tempests, and there shall be many mountains laid low, like unto a valley, and there shall be many places which are now called valleys which shall become mountains, whose height is great.

ແລະ ທາງໃຫຍ່ຫລາຍສາຍຈະຂາດອອກ, ແລະ ຫລາຍ
ຫົວເມືອງຈະກັບມາຮົກຮ້າງ.

And many highways shall be broken up, and many cities shall become desolate.

ແລະ ຫລຸມຝັງສົບເປັນຈຳນວນຫລວງຫລາຍຈະເປີດອອກ,
ແລະ ປ່ອຍຄົນຕາຍຂຶ້ນເປັນຈຳນວນຫລວງຫລາຍ; ແລະ
ໄພ່ພົນຂອງພຣະເຈົ້າຢ່າງຫລວງຫລາຍຈະມາປະກົດແກ່ຄົນ
ຢ່າງຫລວງຫລາຍ.

And many graves shall be opened, and shall yield up many of their dead; and many saints shall appear unto many.

๘๖ ແລະ ຈົ່ງເບິ່ງ, ທູດໄດ້ບອກຂ້າພະເຈົ້າດັ່ງນີ້; ເພາະເພີ່ນໄດ້ເວົ້າກັບຂ້າພະເຈົ້າວ່າ ມັນຈະມີຟ້າຮ້ອງ ແລະ ຟ້າແມບເຫລື້ອມ ເປັນເວລາຫລາຍຊົ່ວໂມງ.

And behold, thus hath the angel spoken unto me; for he said unto me that there should be thunderings and lightnings for the space of many hours.

๘๗ ແລະ ເພີ່ນໄດ້ເວົ້າກັບຂ້າພະເຈົ້າວ່າ ໃນຂະນະທີ່ຟ້າຮ້ອງ ແລະ ຟ້າແມບເຫລື້ອມ, ແລະ ພະຍຸຝົນຟ້າຄະນອງຍັງມີຢູ່, ວ່າສິ່ງເຫລົ່ານີ້ຈະເປັນໄປ, ຄວາມມືດຈະປົກຄຸມທັງແຜ່ນດິນໂລກເປັນເວລາສາມມື້.

And he said unto me that while the thunder and the lightning lasted, and the tempest, that these things should be, and that darkness should cover the face of the whole earth for the space of three days.

๘๘ ແລະ ທູດໄດ້ເວົ້າກັບຂ້າພະເຈົ້າວ່າ ຄົນຢ່າງຫລວງຫລາຍຈະໄດ້ເຫັນສິ່ງທີ່ອັດສະຈັນໃຈຫລາຍກວ່ານັ້ນ, ເພາະມີເຈດຕະນາທີ່ຈະໃຫ້ພວກເຂົາເຊື່ອว่า ເຄື່ອງໝາຍ ແລະ ການແປກປະຫລາດເຫລົ່ານີ້ຈະເກີດຂຶ້ນທົ່ວຜືນແຜ່ນດິນນີ້ ໂດຍມີເຈດຕະນາທີ່ຈະບໍ່ໃຫ້ມີສາເຫດຂອງການບໍ່ເຊື່ອຖືໃນບັນດາລູກຫລານມະນຸດ—

And the angel said unto me that many shall see greater things than these, to the intent that they might believe that these signs and these wonders should come to pass upon all the face of this land, to the intent that there should be no cause for unbelief among the children of men—

๘๙ ແລະ ນີ້ດ້ວຍເຈດຕະນາว่า ຜູ້ໃດກໍຕາມທີ່ມີຄວາມເຊື່ອ ຜູ້ນັ້ນຈະລອດ, ແລະ ຜູ້ໃດກໍຕາມທີ່ຈະບໍ່ເຊື່ອ, ການພິພາກສາອັນຊອບທຳຈະມາສູ່ຜູ້ນັ້ນ; ແລະ ຖ້າຫາກພວກເຂົາຖືກກ່າວໂທດ, ພວກເຂົາກໍເປັນຜູ້ນຳການກ່າວໂທດນັ້ນມາສູ່ຕົນເອງ.

And this to the intent that whosoever will believe might be saved, and that whosoever will not believe, a righteous judgment might come upon them; and also if they are condemned they bring upon themselves their own condemnation.

๙๐ ແລະ ບັດນີ້ຈົ່ງຈື່ຈຳໄວ້, ຈົ່ງຈື່ຈຳໄວ້ພີ່ນ້ອງຂອງຂ້າພະເຈົ້າ, ວ່າ ຜູ້ໃດກໍຕາມທີ່ຕາຍໄປ, ກໍເປັນຍ້ອນວ່າລາວສ້າງຄວາມຕາຍໃຫ້ຕົວລາວເອງ, ແລະ ຜູ້ໃດກໍຕາມທີ່ກະທຳຄວາມຊົ່ວຮ້າຍ, ຜູ້ນັ້ນກໍຈະນຳຄວາມຊົ່ວຮ້າຍມາສູ່ຕົວເຂົາເອງ; ເພາະຈົ່ງເບິ່ງ, ພວກທ່ານມີ ອິດສະລະ; ພວກທ່ານໄດ້ຮັບອະນຸຍາດໃຫ້ເຮັດເພື່ອຕົວເອງ; ເພາະຈົ່ງເບິ່ງ, ພຣະເຈົ້າໄດ້ປະທານ ຄວາມຮູ້ໃຫ້ແກ່ພວກທ່ານ ແລະ ພຣະອົງໄດ້ເຮັດໃຫ້ພວກທ່ານເປັນອິດສະລະ.

And now remember, remember, my brethren, that whosoever perisheth, perisheth unto himself; and whosoever doeth iniquity, doeth it unto himself; for behold, ye are free; ye are permitted to act for yourselves; for behold, God hath given unto you a knowledge and he hath made you free.

๙๑ ພຣະອົງປະທານມັນໃຫ້ພວກທ່ານ ເພື່ອວ່າພວກທ່ານຈະໄດ້ ຮູ້ຈັກຄວາມດີຈາກຄວາມຊົ່ວ, ແລະ ພຣະອົງຈະປະທານມັນໃຫ້ພວກທ່ານເພື່ອວ່າ ພວກທ່ານຈະໄດ້ ເລືອກເອົາຊີວິດ ຫລື ຄວາມຕາຍ; ແລະ ພວກທ່ານສາມາດເຮັດຄວາມດີໄດ້ ແລະ ຖືກນຳກັບຄືນຫາສິ່ງທີ່ດີ, ຫລື ໃຫ້ສິ່ງທີ່ດີກັບຄືນມາຫາພວກທ່ານ; ຫລື ພວກທ່ານສາມາດເຮັດຄວາມຊົ່ວໄດ້, ແລະ ໃຫ້ສິ່ງທີ່ຊົ່ວກັບຄືນມາຫາພວກທ່ານ.

He hath given unto you that ye might know good from evil, and he hath given unto you that ye might choose life or death; and ye can do good and be restored unto that which is good, or have that which is good restored unto you; or ye can do evil, and have that which is evil restored unto you.

ຮີລາມັນ ๑๕

๑ ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຈົ່ງເບິ່ງ, ຂ້າພະເຈົ້າຂໍປະກາດກັບພວກທ່ານວ່າ ຖ້າຫາກພວກທ່ານບໍ່ກັບໃຈ ແລ້ວບ້ານເຮືອນຂອງພວກທ່ານຈະຖືກປະຖິ້ມໃຫ້ ຮົກຮ້າງ.

๘ ແທ້ຈິງແລ້ວ, ຖ້າຫາກພວກທ່ານບໍ່ກັບໃຈ ເຫດຮ້າຍອັນໃຫຍ່ຫລວງນັ້ນຈະເຮັດໃຫ້ພວກແມ່ຍິງຂອງພວກທ່ານ ເປັນທຸກໃນມື້ທີ່ນາງຍັງເປັນແມ່ລູກອ່ອນຢູ່; ເພາະວ່າພວກທ່ານຈະພະຍາຍາມໜີໄປ ແລະ ຈະບໍ່ມີບ່ອນພັກພາອາໄສ; ແທ້ຈິງແລ້ວ, ແລະ ວິບັດແກ່ນາງຜູ້ທີ່ ຖືພາ ເພາະນາງຈະໜັກທ້ອງ ແລະ ໜີໄປບໍ່ໄດ້; ສະນັ້ນ, ນາງຈົ່ງຈະຖືກຢຽບຍ່ຳ ແລະ ຖືກປະຖິ້ມໃຫ້ຕາຍໄປ.

๙ ແທ້ຈິງແລ້ວ, ວິບັດແກ່ຜູ້ຄົນພວກນີ້ຜູ້ມີຊື່ວ່າຜູ້ຄົນຂອງນີໄຟ ຖ້າຫາກພວກເຂົາບໍ່ກັບໃຈໃນເວລາທີ່ພວກເຂົາໄດ້ເຫັນ ເຄື່ອງໝາຍ ແລະ ການແປກປະຫລາດທັງໝົດນີ້ ຊຶ່ງຈະ ສະແດງແກ່ພວກເຂົາ; ເພາະຈົ່ງເບິ່ງ, ພວກເຂົາເປັນຜູ້ຄົນທີ່ ພຣະຜູ້ເປັນເຈົ້າເລືອກໄວ້; ແທ້ຈິງແລ້ວ, ພຣະອົງຮັກຜູ້ຄົນຂອງ ນີໄຟ, ແລະ ພຣະອົງໄດ້ຕີສອນພວກເຂົານຳອີກ; ແທ້ຈິງແລ້ວ, ໃນເວລາທີ່ພວກເຂົາກະທຳຄວາມຊົ່ວຮ້າຍ ພຣະອົງໄດ້ ຕີສອນ ພວກເຂົາ ເພາະພຣະອົງຮັກພວກເຂົາ.

๔ ແຕ່ຈົ່ງເບິ່ງ ພີ່ນ້ອງຂອງຂ້າພະເຈົ້າ, ພຣະອົງກຽດຊັງຊາວເລ ມັນ ເພາະວ່າພວກເຂົາກະທຳຄວາມຊົ່ວຢູ່ຕະຫລອດເວລາ, ແລະ ມັນເປັນຍ້ອນຄວາມຊົ່ວຮ້າຍຂອງ ຮີດຄອງປະເພນີຂອງ ບັນພະບຸລຸດຂອງພວກເຂົາ. ແຕ່ຈົ່ງເບິ່ງ, ຄວາມລອດໄດ້ມາເຖິງ ພວກເຂົາແລ້ວ ໂດຍທາງການສັ່ງສອນຂອງຊາວນີໄຟ; ແລະ ດ້ວຍເຈດຕະນານີ້ ພຣະຜູ້ເປັນເຈົ້າຈົ່ງເຮັດໃຫ້ວັນເວລາຂອງ ພວກເຂົາ ຍືດຍາວອອກໄປ.

๕ ແລະ ຂ້າພະເຈົ້າຢາກໃຫ້ພວກທ່ານເຫັນວ່າ ພວກເຂົາ ສ່ວນ ຫລາຍຢູ່ໃນທາງແຫ່ງໜ້າທີ່ຂອງຕົນ, ແລະ ພວກເຂົາເດີນໄປ ຢ່າງຮອບຄອບຕໍ່ພຣະພັກຂອງພຣະເຈົ້າ, ແລະ ພວກເຂົາຍຶດຖື ທີ່ຈະຮັກສາພຣະບັນຍັດ ແລະ ຮັກສາຂໍ້ກຳນົດ ແລະ ຮັກສາການ ພິພາກສາຂອງພຣະອົງຕາມກົດຂອງໂມເຊ.

๖ ແທ້ຈິງແລ້ວ, ຂ້າພະເຈົ້າກ່າວກັບພວກທ່ານວ່າ ພວກເຂົາ ສ່ວນຫລາຍກຳລັງກະທຳຢ່າງນີ້, ແລະ ພວກເຂົາກຳລັງ ພະຍາຍາມດ້ວຍຄວາມພາກພຽນອັນບໍ່ຮູ້ອິດເມື່ອຍທີ່ຈະນຳພາ ພີ່ນ້ອງທີ່ເຫລືອຢູ່ຂອງພວກເຂົາມາສູ່ຄວາມຮູ້ເລື່ອງຄວາມຈິງ; ສະນັ້ນ ທຸກໆມື້ພວກເຂົາຈົ່ງມີຄົນມາເພີ່ມຫລາຍຂຶ້ນ.

Helaman 15

And now, my beloved brethren, behold, I declare unto you that except ye shall repent your houses shall be left unto you desolate.

Yea, except ye repent, your women shall have great cause to mourn in the day that they shall give suck; for ye shall attempt to flee and there shall be no place for refuge; yea, and wo unto them which are with child, for they shall be heavy and cannot flee; therefore, they shall be trodden down and shall be left to perish.

Yea, wo unto this people who are called the people of Nephi except they shall repent, when they shall see all these signs and wonders which shall be showed unto them; for behold, they have been a chosen people of the Lord; yea, the people of Nephi hath he loved, and also hath he chastened them; yea, in the days of their iniquities hath he chastened them because he loveth them.

But behold my brethren, the Lamanites hath he hated because their deeds have been evil continually, and this because of the iniquity of the tradition of their fathers. But behold, salvation hath come unto them through the preaching of the Nephites; and for this intent hath the Lord prolonged their days.

And I would that ye should behold that the more part of them are in the path of their duty, and they do walk circumspectly before God, and they do observe to keep his commandments and his statutes and his judgments according to the law of Moses.

Yea, I say unto you, that the more part of them are doing this, and they are striving with unwearied diligence that they may bring the remainder of their brethren to the knowledge of the truth; therefore there are many who do add to their numbers daily.

ກ ແລະ ຈົ່ງເບິ່ງ, ພວກທ່ານໄດ້ຮູ້ດ້ວຍຕົວເອງແລ້ວ, ເພາະ ພວກທ່ານໄດ້ເຫັນມາແລ້ວ, ວ່າຫລາຍຕໍ່ຫລາຍຄົນໄດ້ຖືກ ນຳມາສູ່ຄວາມຮູ້ເລື່ອງຄວາມຈິງ, ແລະ ໃຫ້ຮູ້ເລື່ອງຮີດຄອງ ປະເພນີອັນຊົ່ວຮ້າຍ ແລະ ໜ້າກຽດຊັງຂອງບັນພະບຸລຸດຂອງ ພວກເຂົາ, ແລະ ຖືກຊັກຊວນໃຫ້ມາເຊື່ອພຣະຄຳພີອັນສັກສິດ, ແທ້ຈິງແລ້ວ, ໃຫ້ມາເຊື່ອຄຳທຳນາຍຂອງສາດສະດາຜູ້ບໍລິສຸດ ຊຶ່ງມີຂຽນໄວ້ ຊຶ່ງໄດ້ຊັກຊວນໃຫ້ພວກເຂົາມີສັດທາໃນພຣະຜູ້ ເປັນເຈົ້າ, ແລະ ມາສູ່ການກັບໃຈ, ຊຶ່ງສັດທາ ແລະ ການກັບໃຈ ນັ້ນໄດ້ນຳການ ປ່ຽນແປງມາສູ່ໃຈຂອງພວກເຂົາ—

And behold, ye do know of yourselves, for ye have witnessed it, that as many of them as are brought to the knowledge of the truth, and to know of the wicked and abominable traditions of their fathers, and are led to believe the holy scriptures, yea, the prophecies of the holy prophets, which are written, which leadeth them to faith on the Lord, and unto repentance, which faith and repentance bringeth a change of heart unto them—

ຖ ສະນັ້ນ, ພວກທ່ານຈຶ່ງຮູ້ດ້ວຍຕົວເອງว่า, ຫລາຍຕໍ່ຫລາຍ ຄົນທີ່ໄດ້ມາເຖິງຈຸດນີ້ຍ່ອມ ໝັ້ນຄົງ ແລະ ແນ່ວແນ່ຢູ່ໃນສັດທາ, ແລະ ຢູ່ໃນສິ່ງທີ່ເຮັດໃຫ້ພວກເຂົາເປັນອິດສະລະ.

Therefore, as many as have come to this, ye know of yourselves are firm and steadfast in the faith, and in the thing wherewith they have been made free.

ດ ແລະ ພວກທ່ານກໍຮູ້ອີກว่า ພວກເຂົາໄດ້ ຝັງອາວຸດແຫ່ງ ສົງຄາມຂອງພວກເຂົາໄວ້, ແລະ ພວກເຂົາຢ້ານທີ່ຈະເອົາມັນຂຶ້ນ ມາເພາະຢ້ານว่าໃນທາງໃດທາງໜຶ່ງ ພວກເຂົາຈະເຮັດບາບ; ແທ້ຈິງແລ້ວ, ພວກທ່ານເຫັນໄດ້ว่า ພວກເຂົາຢ້ານທີ່ຈະເຮັດ ບາບ—ເພາະຈົ່ງເບິ່ງ ພວກເຂົາຈະຍອມຕົວໃຫ້ສັດຕູຂອງພວກ ເຂົາຢຽບຍ່ຳ ແລະ ຂ້າຖິ້ມ, ແລະ ຈະບໍ່ຍອມຍົກດາບຂອງພວກ ເຂົາຂຶ້ນເພື່ອຕໍ່ສູ້ພວກເຂົາ, ແລະ ນີ້ກໍເປັນເພາະສັດທາຂອງ ພວກເຂົາໃນພຣະຄຣິດ.

And ye know also that they have buried their weapons of war, and they fear to take them up lest by any means they should sin; yea, ye can see that they fear to sin—for behold they will suffer themselves that they be trodden down and slain by their enemies, and will not lift their swords against them, and this because of their faith in Christ.

ຄ ແລະ ບັດນີ້, ເປັນຍ້ອນຄວາມແນ່ວແນ່ຂອງພວກເຂົາໃນສິ່ງ ທີ່ພວກເຂົາໄດ້ເຊື່ອຖື, ແລະ ເປັນຍ້ອນຄວາມໝັ້ນຄົງຂອງພວກ ເຂົາ ເວລາພວກເຂົາໄດ້ຮັບແສງສະຫວ່າງມາແລ້ວເທື່ອໜຶ່ງ, ຈົ່ງ ເບິ່ງ, ພຣະຜູ້ເປັນເຈົ້າຈະປະທານພອນໃຫ້ແກ່ພວກເຂົາ ແລະ ຈະເຮັດໃຫ້ວັນເວລາຂອງພວກເຂົາຍືດຍາວອອກໄປ, ທັງໆທີ່ ພວກເຂົາເຄີຍສ້າງຄວາມຊົ່ວຮ້າຍມາກ່ອນ—

And now, because of their steadfastness when they do believe in that thing which they do believe, for because of their firmness when they are once enlightened, behold, the Lord shall bless them and prolong their days, notwithstanding their iniquity—

ຄກ ແທ້ຈິງແລ້ວ, ເຖິງແມ່ນว่าพวกเขาจะเสื่อมโซมลົງສູ່ ຄວາມບໍ່ເຊື່ອຖື ພຣະຜູ້ເປັນເຈົ້າກໍຍັງຈະເຮັດໃຫ້ວັນເວລາຂອງ ພວກເຂົາ ຍືດຍາວອອກໄປ, ຈົນເຖິງເວລາທີ່ກ່າວໄວ້ໂດຍ ບັນພະບຸລຸດຂອງພວກເຮົາ, ແລະ ໂດຍສາດສະດາ ຊີນັດ ແລະ ສາດສະດາຄົນອື່ນໆອີກຫລາຍທ່ານກ່ຽວກັບ ການນຳພີ່ນ້ອງ ຊາວເລມັນຂອງພວກເຮົາກັບຄືນມາສູ່ຄວາມຮູ້ເລື່ອງຄວາມຈິງ ອີກ—

Yea, even if they should dwindle in unbelief the Lord shall prolong their days, until the time shall come which hath been spoken of by our fathers, and also by the prophet Zenos, and many other prophets, concerning the restoration of our brethren, the Lamanites, again to the knowledge of the truth—

ຄຂ ແທ້ຈິງແລ້ວ, ຂ້າພະເຈົ້າກ່າວກັບພວກທ່ານว่า ຄຳສັນຍາ ຂອງພຣະຜູ້ເປັນເຈົ້າຈະຖືກມອບໃຫ້ແກ່ຊາວເລມັນຜູ້ເປັນ ພີ່ນ້ອງຂອງພວກເຂົາໃນຍຸກສຸດທ້າຍ; ແລະ ເຖິງແມ່ນว่าพวก ເຂົາຈະໄດ້ຮັບຄວາມທຸກທລາຍປານໃດກໍຕາມ, ແລະ ເຖິງ ແມ່ນว่าพวกเขาจะถืก ຂັບໄລ່ໄປມາທົ່ວໜ້າແຜ່ນດິນໂລກ, ແລະ ຈະຖືກຕາມລ້າ, ແລະ ຈະຖືກທຸບຕີ, ແລະ ຈະແຕກກະຈັດ ກະຈາຍໄປ, ແລະ ບໍ່ມີບ່ອນພັກພາອາໄສກໍຕາມ, ແຕ່ພຣະຜູ້ ເປັນເຈົ້າຍັງຈະ ເມດຕາພວກເຂົາຢູ່.

Yea, I say unto you, that in the latter times the promises of the Lord have been extended to our brethren, the Lamanites; and notwithstanding the many afflictions which they shall have, and notwithstanding they shall be driven to and fro upon the face of the earth, and be hunted, and shall be smitten and scattered abroad, having no place for refuge, the Lord shall be merciful unto them.

ແລະ ຈະເປັນເຊັ່ນນີ້ຕາມຄຳທຳນາຍ, ເພື່ອພວກເຂົາຈະ ມາສູ່ຄວາມຮູ້ທີ່ແທ້ຈິງ, ຊຶ່ງເປັນຄວາມຮູ້ເຖິງພຣະຜູ້ໄຖ່ ແລະ ຜູ້ລ້ຽງ ຜູ້ຍິ່ງໃຫຍ່ ແລະ ແທ້ຈິງຂອງພວກເຂົາ, ແລະ ຖືກນັບເຂົ້າຢູ່ໃນ ບັນດາຝູງແກະຂອງພຣະອົງ.

And this is according to the prophecy, that they shall again be brought to the true knowledge, which is the knowledge of their Redeemer, and their great and true shepherd, and be numbered among his sheep.

ສະນັ້ນ ຂ້າພະເຈົ້າກ່າວກັບພວກທ່ານວ່າ, ມັນຈະເປັນ ສິ່ງດີ ສຳລັບພວກເຂົາຫລາຍກວ່າພວກທ່ານ ຖ້າຫາກພວກທ່ານບໍ່ ກັບໃຈ.

Therefore I say unto you, it shall be better for them than for you except ye repent.

๒ ແຕ່ຈົ່ງເບິ່ງ, ມັນບໍ່ມີສັດປ່າສຳລັບທີ່ຈະລ່າເນື້ອໃນແຜ່ນດິນ ເຫລົ່ານັ້ນຊຶ່ງຊາວນີໄຟໄດ້ປະຖິ້ມ, ແລະ ມັນບໍ່ມີສັດປ່າທີ່ຈະໃຫ້ ພວກໂຈນລ່າເລີຍ ນອກຈາກມີແຕ່ຢູ່ໃນຖິ່ນແຫ້ງແລ້ງກັນດານ ເທົ່ານັ້ນ.

๓ ແລະ ພວກໂຈນບໍ່ສາມາດດຳລົງຊີວິດ ນອກຈາກຈະເຂົ້າໄປ ຢູ່ໃນຖິ່ນແຫ້ງແລ້ງກັນດານ ເພາະຄວາມອຶດຫິວ ຍ້ອນວ່າຊາວນີ ໄຟໄດ້ປະຖິ້ມແຜ່ນດິນຂອງພວກເຂົາໄວ້ໃຫ້ຮົກຮ້າງ ແລະ ໄດ້ ເຕົ້າໂຮມເອົາຝູງສັດລ້ຽງຂອງພວກເຂົາ ແລະ ຝູງສັດໃຊ້ ແຮງງານຂອງພວກເຂົາ ແລະ ເຂົ້າຂອງທັງໝົດຂອງພວກເຂົາ, ແລະ ພວກເຂົາຢູ່ເປັນກຸ່ມດຽວ.

๔ ສະນັ້ນ, ຈຶ່ງບໍ່ມີໂອກາດສຳລັບພວກໂຈນທີ່ຈະປຸ້ນ ແລະ ຈະ ຊອກຫາອາຫານໄດ້, ນອກຈາກຈະຍົກມາສູ້ຮົບຢ່າງເປີດເຜີຍ ກັບຊາວນີໄຟເທົ່ານັ້ນ; ແລະ ຊາວນີໄຟໂດຍທີ່ໄດ້ຢູ່ເປັນກຸ່ມດຽວ, ແລະ ມີຈຳນວນຢ່າງຫລວງຫລາຍ, ແລະ ໂດຍທີ່ໄດ້ເກັບມ້ຽນ ສະບຽງອາຫານ, ລວມທັງມ້າ ແລະ ງົວ, ແລະ ຝູງສັດທຸກ ຊະນິດໄວ້ສຳລັບພວກເຂົາເອງ, ເພື່ອພວກເຂົາຈະຢູ່ລອດໄດ້ເປັນ ເວລາເຈັດປີ, ຊຶ່ງໃນໄລຍະເວລານັ້ນ ພວກເຂົາມີຄວາມຫວັງວ່າ ພວກເຂົາຈະໄດ້ທຳລາຍພວກໂຈນໃຫ້ໝົດສິ້ນໄປຈາກໜ້າ ແຜ່ນດິນ; ແລະ ປີທີສິບແປດໄດ້ຜ່ານໄປດັ່ງນີ້.

๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີທີສິບເກົ້າ ກິດດີອານໄຮ ເຫັນວ່າມັນສົມຄວນທີ່ລາວຈະຍົກໄປສູ້ຮົບກັບຊາວນີໄຟ, ເພາະວ່າມັນບໍ່ມີທາງອື່ນທີ່ພວກເຂົາຈະຢູ່ລອດໄດ້ ນອກຈາກຈະ ປຸ້ນ ແລະ ລັກ ແລະ ຂ້າເທົ່ານັ້ນ.

๖ ແລະ ພວກເຂົາບໍ່ກ້າທີ່ຈະກະຈັດກະຈາຍໄປຕາມແຜ່ນດິນ ເທົ່າທີ່ຄວນເພື່ອພວກເຂົາຈະໄດ້ປູກເມັດພືດ, ເພາະຢ້ານວ່າ ຊາວນີໄຟຈະຍົກທັບມາ ແລະ ຂ້າພວກເຂົາເສຍ; ສະນັ້ນ ກິດດີ ອານໄຮຈຶ່ງອອກຄຳສັ່ງໃຫ້ກອງທັບຂອງລາວວ່າ ໃນປີນີ້ພວກ ເຂົາຈະຍົກໄປສູ້ຮົບກັບຊາວນີໄຟ.

3 Nephi 4

And it came to pass that in the latter end of the eighteenth year those armies of robbers had prepared for battle, and began to come down and to sally forth from the hills, and out of the mountains, and the wilderness, and their strongholds, and their secret places, and began to take possession of the lands, both which were in the land south and which were in the land north, and began to take possession of all the lands which had been deserted by the Nephites, and the cities which had been left desolate.

But behold, there were no wild beasts nor game in those lands which had been deserted by the Nephites, and there was no game for the robbers save it were in the wilderness.

And the robbers could not exist save it were in the wilderness, for the want of food; for the Nephites had left their lands desolate, and had gathered their flocks and their herds and all their substance, and they were in one body.

Therefore, there was no chance for the robbers to plunder and to obtain food, save it were to come up in open battle against the Nephites; and the Nephites being in one body, and having so great a number, and having reserved for themselves provisions, and horses and cattle, and flocks of every kind, that they might subsist for the space of seven years, in the which time they did hope to destroy the robbers from off the face of the land; and thus the eighteenth year did pass away.

And it came to pass that in the nineteenth year Giddianhi found that it was expedient that he should go up to battle against the Nephites, for there was no way that they could subsist save it were to plunder and rob and murder.

And they durst not spread themselves upon the face of the land insomuch that they could raise grain, lest the Nephites should come upon them and slay them; therefore Giddianhi gave commandment unto his armies that in this year they should go up to battle against the Nephites.

໗ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຍົກທັບມາສູ້ຮົບ; ແລະ ມັນເປັນໄປໃນເດືອນທີຫົກ; ແລະ ຈົ່ງເບິ່ງ, ມື້ທີ່ພວກເຂົາຍົກທັບມາສູ້ຮົບນັ້ນເປັນມື້ທີ່ຍິ່ງໃຫຍ່ ແລະ ເປັນໜ້າຢ້ານກົວຫລາຍທີ່ສຸດ; ແລະ ພວກເຂົາໄດ້ແຕ່ງຕົວຕາມແບບຢ່າງຂອງພວກໂຈນ; ແລະ ພວກເຂົາຄຽນໜັງແກະຮອບແອວ ຊຶ່ງຍ້ອມດ້ວຍເລືອດ, ແລະ ຫົວຂອງພວກເຂົາໂລ້ນ, ແລະ ມີເຄື່ອງປ້ອງກັນຫົວ, ແລະ ການປະກົດຂອງກອງທັບຂອງກິດດີອານໄຮນັ້ນມີຈຳນວນພົນຢ່າງຫລວງຫລາຍ ແລະ ເປັນໜ້າຢ້ານກົວຫລາຍ, ຍ້ອນວ່າເຄື່ອງປ້ອງກັນຂອງພວກເຂົາທີ່ຍ້ອມດ້ວຍເລືອດ.

And it came to pass that they did come up to battle; and it was in the sixth month; and behold, great and terrible was the day that they did come up to battle; and they were girded about after the manner of robbers; and they had a lamb-skin about their loins, and they were dyed in blood, and their heads were shorn, and they had head-plates upon them; and great and terrible was the appearance of the armies of Giddianhi, because of their armor, and because of their being dyed in blood.

໘ ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາກອງທັບຊາວນີໄຟເຫັນການປະກົດຂອງກອງທັບຂອງກິດດີອານໄຮແລ້ວ, ກໍໄດ້ລົ້ມລົງຢູ່ກັບພື້ນດິນ, ແລະ ໄດ້ເປັ່ງສຽງຮ້ອງທູນຕໍ່ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ, ເພື່ອພຣະອົງຈະໄດ້ໄວ້ຊີວິດ ແລະ ປົດປ່ອຍພວກເຂົາໃຫ້ພົ້ນຈາກກຳມືຂອງພວກສັດຕູ.

And it came to pass that the armies of the Nephites, when they saw the appearance of the army of Giddianhi, had all fallen to the earth, and did lift their cries to the Lord their God, that he would spare them and deliver them out of the hands of their enemies.

໙ ແລະ ເຫດການໄດ້ບັງເກີດຂຶ້ນຄື ເວລາກອງທັບຂອງກິດດີອານໄຮເຫັນດັ່ງນີ້ ພວກເຂົາຈຶ່ງມີຄວາມປິຕິຍິນດີ, ແລະ ກໍເລີ່ມຮ້ອງໂຮຂຶ້ນດ້ວຍສຽງອັນດັງ ເພາະວ່າພວກເຂົາຄິດວ່າ ຊາວນີໄຟໄດ້ລົ້ມລົງເພາະຄວາມຢ້ານກົວກອງທັບຂອງພວກເຂົາ.

And it came to pass that when the armies of Giddianhi saw this they began to shout with a loud voice, because of their joy, for they had supposed that the Nephites had fallen with fear because of the terror of their armies.

໑໐ ແຕ່ວ່າໃນເລື່ອງນີ້ ພວກເຂົາໄດ້ຜິດຫວັງ ເພາະຊາວນີໄຟບໍ່ໄດ້ ຢ້ານກົວພວກເຂົາເລີຍ; ແຕ່ພວກເຂົາຢ້ານກົວພຣະເຈົ້າຂອງພວກເຂົາ ແລະ ໄດ້ອ້ອນວອນຫາພຣະອົງເພື່ອຂໍຄວາມຄຸ້ມຄອງ; ສະນັ້ນ, ເວລາກອງທັບຂອງກິດດີອານໄຮແລ່ນເຂົ້າມາໃສ່ພວກເຂົາ, ພວກເຂົາກໍຕຽມພ້ອມຢູ່ແລ້ວທີ່ຈະພົບກັບພວກເຂົາ; ແທ້ຈິງແລ້ວ, ພວກເຂົາໄດ້ຕ້ອນຮັບພວກເຂົາດ້ວຍກຳລັງຂອງພຣະຜູ້ເປັນເຈົ້າ.

But in this thing they were disappointed, for the Nephites did not fear them; but they did fear their God and did supplicate him for protection; therefore, when the armies of Giddianhi did rush upon them they were prepared to meet them; yea, in the strength of the Lord they did receive them.

໑໑ ແລະ ການສູ້ຮົບໄດ້ເລີ່ມຂຶ້ນໃນເດືອນທີຫົກ; ແລະ ການສູ້ຮົບເທື່ອນີ້ຍິ່ງໃຫຍ່ ແລະ ໂຫດຮ້າຍທີ່ສຸດ, ແທ້ຈິງແລ້ວ, ການຂ້າຟັນເທື່ອນີ້ໃຫຍ່ຫລວງ ແລະ ໂຫດຮ້າຍທີ່ສຸດ, ເຖິງຂະໜາດທີ່ມັນບໍ່ເຄີຍມີການຂ້າຟັນທີ່ໃຫຍ່ຫລວງເຊັ່ນນີ້ມາກ່ອນເລີຍໃນບັນດາຜູ້ຄົນຂອງລີໄຮ ນັບຕັ້ງແຕ່ເພິ່ນໄດ້ອອກມາຈາກເຢຣູຊາເລັມ.

And the battle commenced in this the sixth month; and great and terrible was the battle thereof, yea, great and terrible was the slaughter thereof, insomuch that there never was known so great a slaughter among all the people of Lehi since he left Jerusalem.

໑໒ ແລະ ເຖິງແມ່ນວ່າກິດດີອານໄຮໄດ້ ນາບຂູ່ ແລະ ກ່າວຄຳສາບານໄວ້ກໍຕາມ, ຈົ່ງເບິ່ງ, ຊາວນີໄຟຍັງໄດ້ໄຊຊະນະພວກເຂົາ, ເຖິງຂະໜາດທີ່ພວກເຂົາໄດ້ແຕກຜ່າຍໄປຕໍ່ໜ້າພວກເຂົາ.

And notwithstanding the threatenings and the oaths which Giddianhi had made, behold, the Nephites did beat them, insomuch that they did fall back from before them.

ແລະ ເຫດການໄດ້ບັງເກີດຂຶ້ນຄື ກິດກິດໂດໄນໄດ້ສັ່ງໃຫ້ກອງທັບຂອງເພີ່ນໄລ່ຕາມພວກເຂົາໄປໃຫ້ຮອດຊາຍແດນຂອງຖິ່ນແຫ້ງແລ້ງກັນດານ, ແລະ ວ່າບໍ່ໃຫ້ໄວ້ຊີວິດຜູ້ໃດເລີຍທີ່ພວກເຂົາພົບເຫັນໃນລະຫວ່າງທາງ; ແລະ ພວກເຂົາໄດ້ຕິດຕາມພວກເຂົາໄປດັ່ງນັ້ນ, ແລະ ໄດ້ຂ້າພວກເຂົາໄປຈົນຮອດຊາຍແດນຂອງຖິ່ນແຫ້ງແລ້ງກັນດານ, ຈົນວ່າໄດ້ເຮັດໃຫ້ຄຳສັ່ງຂອງກິດກິດໂດໄນສຳເລັດ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ກິດດີອານໄຮ, ຜູ້ທີ່ຢືນຕໍ່ສູ້ດ້ວຍຄວາມອົງອາດກ້າຫານໄດ້ຖືກໄລ່ຕາມໃນຂະນະທີ່ລາວໜີໄປ; ແລະ ໂດຍທີ່ມີຄວາມອິດເມື່ອຍເພາະການຕໍ່ສູ້ອັນຍືດຍາວຂອງລາວ, ລາວຈຶ່ງຖືກຕາມທັນ ແລະ ຖືກຂ້າຕາຍ. ແລະ ນີ້ຄືທີ່ສຸດຂອງໂຈນກິດດີອານໄຮ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ກອງທັບຊາວນີໄຟໄດ້ກັບຄືນມາຫາບ່ອນປອດໄພຂອງພວກເຂົາອີກ. ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີສິບເກົ້າໄດ້ຜ່ານໄປ, ແລະ ພວກໂຈນບໍ່ໄດ້ຍົກມາສູ້ຮົບອີກ; ທັງບໍ່ໄດ້ຍົກມາໃນປີທີຊາວຄືກັນ.

ແລະ ໃນປີທີຊາວເອັດ ພວກເຂົາກໍບໍ່ໄດ້ຍົກມາສູ້ຮົບ, ແຕ່ວ່າພວກເຂົາໄດ້ຍົກມາລ້ອມຜູ້ຄົນຂອງນີໄຟໄວ້ໂດຍຮອບ; ເພາະພວກເຂົາຄິດວ່າ ຖ້າຫາກພວກເຂົາກັນຜູ້ຄົນຂອງນີໄຟຈາກແຜ່ນດິນຂອງພວກເຂົາ, ແລະ ລ້ອມໄວ້ທຸກດ້ານ, ແລະ ຖ້າຫາກພວກເຂົາກັນພວກເຂົາຈາກຜົນປະໂຫຍດພາຍນອກຂອງພວກເຂົາ, ແລ້ວພວກເຂົາອາດຈະເຮັດໃຫ້ຄົນພວກເຂົາຕ້ອງຍອມມອບຕົວຕາມຄວາມປາດຖະໜາຂອງພວກເຂົາ.

ບັດນີ້ພວກເຂົາໄດ້ແຕ່ງຕັ້ງຫົວໜ້າອີກຄົນໜຶ່ງ, ຊຶ່ງມີຊື່ວ່າ ເຊັມນາໄຮຫາ; ສະນັ້ນ ເຊັມນາໄຮຫາຜູ້ນີ້ເອງທີ່ໄດ້ອອກຄຳສັ່ງໃຫ້ປິດລ້ອມເທື່ອນີ້.

ແຕ່ຈົ່ງເບິ່ງ, ສິ່ງນີ້ຈຶ່ງເປັນການໄດ້ປຽບແກ່ຊາວນີໄຟ; ເພາະວ່າມັນເປັນໄປບໍ່ໄດ້ທີ່ພວກໂຈນຈະປິດລ້ອມໄດ້ຢ່າງຄົນນານພໍທີ່ຈະໄດ້ຮັບຜົນອັນໃດຈາກຊາວນີໄຟ ເພາະສະບຽງອາຫານຂອງພວກເຂົາທີ່ພວກເຂົາໄດ້ສະສົມໄວ້ຢ່າງຫລວງຫລາຍ,

ແລະ ເປັນຍ້ອນການຂາດເຂີນສະບຽງອາຫານໃນບັນດາພວກໂຈນ; ເພາະຈົ່ງເບິ່ງ, ພວກເຂົາບໍ່ມີອັນໃດກິນເລີຍນອກຈາກຊີ້ນເທົ່ານັ້ນ, ເພື່ອພວກເຂົາຈະຢູ່ລອດໄດ້ ຊຶ່ງເປັນຊີ້ນທີ່ພວກເຂົາໄດ້ເອົາມາຈາກຖິ່ນແຫ້ງແລ້ງກັນດານ;

ແລະ ເຫດການໄດ້ບັງເກີດຂຶ້ນຄື ສັດ ປ່າທີ່ເຄີຍຫາມາໄດ້ກໍກັບຫາຍາກຫລາຍຂຶ້ນໃນຖິ່ນແຫ້ງແລ້ງກັນດານ ເຖິງຂະໜາດທີ່ພວກໂຈນກຳລັງຈະຕາຍດ້ວຍຄວາມອຶດຫິວ.

And it came to pass that Gidgiddoni commanded that his armies should pursue them as far as the borders of the wilderness, and that they should not spare any that should fall into their hands by the way; and thus they did pursue them and did slay them, to the borders of the wilderness, even until they had fulfilled the commandment of Gidgiddoni.

And it came to pass that Giddianhi, who had stood and fought with boldness, was pursued as he fled; and being weary because of his much fighting he was overtaken and slain. And thus was the end of Giddianhi the robber.

And it came to pass that the armies of the Nephites did return again to their place of security. And it came to pass that this nineteenth year did pass away, and the robbers did not come again to battle; neither did they come again in the twentieth year.

And in the twenty and first year they did not come up to battle, but they came up on all sides to lay siege round about the people of Nephi; for they did suppose that if they should cut off the people of Nephi from their lands, and should hem them in on every side, and if they should cut them off from all their outward privileges, that they could cause them to yield themselves up according to their wishes.

Now they had appointed unto themselves another leader, whose name was Zemnarihah; therefore it was Zemnarihah that did cause that this siege should take place.

But behold, this was an advantage to the Nephites; for it was impossible for the robbers to lay siege sufficiently long to have any effect upon the Nephites, because of their much provision which they had laid up in store,

And because of the scantiness of provisions among the robbers; for behold, they had nothing save it were meat for their subsistence, which meat they did obtain in the wilderness;

And it came to pass that the wild game became scarce in the wilderness insomuch that the robbers were about to perish with hunger.

ຄ ແລະ ຊາວນີໄຟໄດ້ເລີ່ມເດີນທັບຕະຫລອດທັງກາງເວັນ ແລະ ກາງຄືນ, ແລະ ໄດ້ເຂົ້າໂຈມຕີກອງທັບຂອງພວກເຂົາ ແລະ ໄດ້ຟາດຟັນພວກເຂົາລົງເປັນພັນໆເປັນໝື່ນໆຄົນ.

And the Nephites were continually marching out by day and by night, and falling upon their armies, and cutting them off by thousands and by tens of thousands.

ຄ ແລະ ມັນຈຶ່ງເປັນຄວາມປາດຖະໜາຂອງຜູ້ຄົນຂອງເຊັມນາໄຮຫາທີ່ຈະລົ້ມເລີກແຜນການຂອງພວກເຂົາດັ່ງນີ້, ເພາະຄວາມພິນາດອັນໃຫຍ່ຫລວງ ຊຶ່ງເກີດກັບພວກເຂົາທັງກາງເວັນ ແລະ ກາງຄືນ,

And thus it became the desire of the people of Zemnarihah to withdraw from their design, because of the great destruction which came upon them by night and by day.

ຄ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຊັມນາໄຮຫາຈຶ່ງໄດ້ອອກຄຳສັ່ງໃຫ້ຜູ້ຄົນຂອງລາວຖອນຕົວອອກຈາກການປິດລ້ອມ, ແລະ ເດີນທັບຂຶ້ນໄປຫາຂົງເຂດທີ່ຢູ່ເໜືອສຸດຂອງແຜ່ນດິນທາງເໜືອ.

And it came to pass that Zemnarihah did give command unto his people that they should withdraw themselves from the siege, and march into the furthermost parts of the land northward.

ຄ ບັດນີ້, ກິດກິດໂດໄນໂດຍທີ່ຮູ້ຈັກແຜນການຂອງພວກເຂົາ, ແລະ ໂດຍທີ່ຮູ້ຈັກເຖິງຄວາມອ່ອນແອຂອງພວກເຂົາ ເພາະຄວາມຕ້ອງການອາຫານຂອງພວກເຂົາ, ແລະ ການຂ້າຟັນຢ່າງຫລວງຫລາຍຊຶ່ງເກີດຂຶ້ນໃນບັນດາພວກເຂົາ, ສະນັ້ນ ເພີ່ນຈຶ່ງໄດ້ສັ່ງໃຫ້ກອງທັບຂອງເພີ່ນອອກໄປໃນເວລາກາງຄືນ ແລະ ໄດ້ດັກສະກັດທາງໜີຂອງພວກເຂົາ ແລະ ໄດ້ວາງກຳລັງໄວ້ຕາມເສັ້ນທາງທີ່ພວກເຂົາຈະໜີໄປ.

And now, Gidgiddoni being aware of their design, and knowing of their weakness because of the want of food, and the great slaughter which had been made among them, therefore he did send out his armies in the night-time, and did cut off the way of their retreat, and did place his armies in the way of their retreat.

ຄ ແລະ ພວກເຂົາໄດ້ເຮັດແບບນີ້ໃນເວລາກາງຄືນ, ແລະ ໄດ້ເດີນທັບເລີຍໄປທາງໜ້າຂອງພວກໂຈນ, ສະນັ້ນ ໃນມື້ຕໍ່ມາ ເວລາພວກໂຈນເລີ່ມເດີນທັບຂອງພວກເຂົາໄປ, ພວກເຂົາຈຶ່ງໄດ້ພົບກັບກອງທັບຂອງຊາວນີໄຟ ທັງທາງດ້ານໜ້າຂອງພວກເຂົາ ແລະ ທາງດ້ານຫລັງຂອງພວກເຂົາ.

And this did they do in the night-time, and got on their march beyond the robbers, so that on the morrow, when the robbers began their march, they were met by the armies of the Nephites both in their front and in their rear.

ຄ ແລະ ພວກໂຈນຜູ້ຢູ່ທາງໃຕ້ກໍໄດ້ຖືກສະກັດກັ້ນໃນບ່ອນທີ່ພວກເຂົາໜີມາ. ແລະ ທັງໝົດນີ້ເປັນໄປຕາມຄຳສັ່ງຂອງກິດກິດໂດໄນ.

And the robbers who were on the south were also cut off in their places of retreat. And all these things were done by command of Gidgiddoni.

ຄ ແລະ ມີຫລາຍພັນຄົນທີ່ໄດ້ຍອມມອບຕົວເປັນຊະເລີຍເສີກຕໍ່ຊາວນີໄຟ, ແລະ ພວກທີ່ເຫລືອຢູ່ກໍຖືກຂ້າ.

And there were many thousands who did yield themselves up prisoners unto the Nephites, and the remainder of them were slain.

ຄ ແລະ ເຊັມນາໄຮຫາຜູ້ນຳຂອງພວກເຂົາຖືກຈັບແຂວນຄໍຢູ່ເທິງຕົ້ນໄມ້, ແທ້ຈິງແລ້ວ, ຖືກແຂວນໄວ້ຢູ່ຍອດຕົ້ນໄມ້ຈົນເຖິງແກ່ຄວາມຕາຍ. ແລະ ເວລາພວກເຂົາໄດ້ແຂວນລາວໄວ້ຈົນເຖິງຕາຍແລ້ວ, ພວກເຂົາກໍໄດ້ປ້າຕົ້ນໄມ້ນັ້ນລົງ, ແລະ ໄດ້ຮ້ອງຂຶ້ນດ້ວຍສຽງອັນດັງ, ມີຄວາມວ່າ:

And their leader, Zemnarihah, was taken and hanged upon a tree, yea, even upon the top thereof until he was dead. And when they had hanged him until he was dead they did fell the tree to the earth, and did cry with a loud voice, saying:

ຄ ຂໍພຣະຜູ້ເປັນເຈົ້າຈົ່ງປົກປັກຮັກສາຜູ້ຄົນຂອງພຣະອົງດ້ວຍເຖີດ ໃນຄວາມຊອບທຳ ແລະ ໃນໃຈອັນບໍລິສຸດຂອງພວກເຂົາ, ເພື່ອວ່າພວກເຂົາຈະໄດ້ເຮັດໃຫ້ພວກທີ່ພະຍາຍາມຂ້າພວກເຂົາດ້ວຍອຳນາດ, ແລະ ການມົ້ວສຸມລັບຖືກໂຄ່ນລົງກັບພື້ນດິນຄືກັນກັບຊາຍຜູ້ນີ້ຖືກໂຄ່ນລົງກັບພື້ນດິນ.

May the Lord preserve his people in righteousness and in holiness of heart, that they may cause to be felled to the earth all who shall seek to slay them because of power and secret combinations, even as this man hath been felled to the earth.

ມ໐ ແລະ ພວກເຂົາໄດ້ມີຄວາມປີຕິຍິນດີ ແລະ ຮ້ອງຂຶ້ນອີກເປັນ ສຽງດຽວກັນ, ມີຄວາມว่า: ຂໍ ພຣະເຈົ້າຂອງອັບຣາຮາມ, ແລະ ພຣະເຈົ້າຂອງອີຊາກ, ແລະ ພຣະເຈົ້າຂອງຢາໂຄບ, ຈົ່ງໂປດ ຄຸ້ມຄອງຜູ້ຄົນພວກນີ້ດ້ວຍເຖີດ, ຕາບໃດທີ່ພວກເຂົາຍັງ ເອີ້ນ ຫາພຣະນາມຂອງພຣະເຈົ້າຂອງພວກເຂົາຢູ່ເພື່ອຂໍຄວາມ ຄຸ້ມຄອງ.

ມ໑ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາທັງໝົດໄດ້ເປັ່ງ ສຽງອອກມາເປັນສຽງດຽວກັນໃນການຮ້ອງເພງ, ແລະ ສັນລະເສີນພຣະເຈົ້າຂອງພວກເຂົາສຳລັບສິ່ງທີ່ຍິ່ງໃຫຍ່ຊຶ່ງ ພຣະອົງໄດ້ກະທຳເພື່ອພວກເຂົາ, ໃນການປົກປ້ອງພວກເຂົາບໍ່ ໃຫ້ຕົກໄປສູ່ກຳມືຂອງພວກສັດຕູຂອງພວກເຂົາ.

ມ໒ ແທ້ຈິງແລ້ວ, ພວກເຂົາໄດ້ຮ້ອງອອກມາว่า: ໂຮຊັນນາແດ່ອົງ ພຣະເຈົ້າສູງສຸດ. ແລະ ພວກເຂົາໄດ້ຮ້ອງອອກມาว่า: ຂໍພຣະ ນາມຂອງອົງພຣະຜູ້ເປັນເຈົ້າ ຜູ້ຊົງລິດອຳນາດຍິ່ງໃຫຍ່, ພຣະເຈົ້າສູງສຸດ, ຈົ່ງພຣະກະເສີມສຳລານເຖີດ.

ມ໓ ແລະ ໃຈຂອງພວກເຂົາເຕັມໄປດ້ວຍຄວາມສຸກຈົນຫລັ່ງນ້ຳ ຕາອອກມາຢ່າງຫລວງຫລາຍ ເພາະພຣະກະລຸນາທິຄຸນຂອງ ພຣະເຈົ້າໃນການປົດປ່ອຍພວກເຂົາໃຫ້ພົ້ນຈາກກຳມືຂອງສັດຕູ ຂອງພວກເຂົາ; ແລະ ພວກເຂົາຮູ້ວ່າເປັນຍ້ອນການກັບໃຈ ແລະ ການຖ່ອມຕົວຂອງພວກເຂົາ, ພວກເຂົາຈຶ່ງໄດ້ຮັບການປົດປ່ອຍ ໃຫ້ພົ້ນຈາກຄວາມພິນາດອັນເປັນນິດ.

And they did rejoice and cry again with one voice, saying: May the God of Abraham, and the God of Isaac, and the God of Jacob, protect this people in righteousness, so long as they shall call on the name of their God for protection.

And it came to pass that they did break forth, all as one, in singing, and praising their God for the great thing which he had done for them, in preserving them from falling into the hands of their enemies.

Yea, they did cry: Hosanna to the Most High God. And they did cry: Blessed be the name of the Lord God Almighty, the Most High God.

And their hearts were swollen with joy, unto the gushing out of many tears, because of the great goodness of God in delivering them out of the hands of their enemies; and they knew it was because of their repentance and their humility that they had been delivered from an everlasting destruction.

ມໍ ນີໄຟ ๕

๑ ແລະ ບັດນີ້ຈົ່ງເບິ່ງ, ບໍ່ມີຜູ້ໃດຈັກຄົນເລີຍໃນບັນດາຜູ້ຄົນ ທັງໝົດຂອງຊາວນີໄຟໄດ້ສົງໄສໃນຄຳເວົ້າຂອງສາດສະດາຜູ້ ບໍລິສຸດທັງຫລາຍທີ່ໄດ້ເວົ້າໄວ້; ເພາະພວກເຂົາຮູ້ວ່າມັນຈຳເປັນ ທີ່ມັນຈະຕ້ອງເປັນຈິງ.

๒ ແລະ ພວກເຂົາຮູ້ຈັກວ່າ ມັນສົມຄວນທີ່ພຣະຄຣິດຕ້ອງ ສະເດັດມາ ເພາະເຄື່ອງໝາຍຫລາຍຢ່າງ ຊຶ່ງໄດ້ເກີດຂຶ້ນຕາມຄຳ ເວົ້າຂອງສາດສະດາ; ແລະ ເພາະຫລາຍສິ່ງທີ່ໄດ້ເວົ້າໄວ້ນັ້ນໄດ້ ເກີດຂຶ້ນແລ້ວ, ພວກເຂົາຈົ່ງຮູ້ວ່າ ມັນຈຳເປັນທີ່ທຸກສິ່ງຈະ ເກີດຂຶ້ນຕາມຄຳທີ່ໄດ້ເວົ້າໄວ້.

๓ ສະນັ້ນ ພວກເຂົາຈົ່ງໄດ້ປະຖິ້ມບາບທັງໝົດຂອງພວກເຂົາ, ແລະ ຄວາມໜ້າກຽດຊັງຂອງພວກເຂົາ, ແລະ ການໂສເພນີ ຂອງພວກເຂົາ, ແລະ ໄດ້ຮັບໃຊ້ພຣະເຈົ້າຈົນສຸດຄວາມພາກ ພຽນຕະຫລອດວັນ ແລະ ຄືນ.

๔ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເວລາພວກເຂົາໄດ້ຈັບ ພວກໂຈນທັງໝົດມາເປັນຊະເລີຍ, ເຖິງຂະໜາດທີ່ບໍ່ມີຜູ້ໃດທີ່ ບໍ່ໄດ້ຖືກຂ້າໜີລອດໄປໄດ້, ພວກເຂົາຈົ່ງໄດ້ເອົາຊະເລີຍເຂົ້າຄຸກ, ແລະ ໄດ້ສັ່ງສອນພຣະຄຳຂອງພຣະເຈົ້າໃຫ້ແກ່ພວກຊະເລີຍ ເຫລົ່ານັ້ນ; ແລະ ຫລາຍຕໍ່ຫລາຍຄົນທີ່ໄດ້ກັບໃຈຈາກບາບຂອງ ພວກເຂົາ ແລະ ໄດ້ເຂົ້າເຮັດພັນທະສັນຍາວ່າພວກເຂົາຈະບໍ່ເຮັດ ການຄາດຕະກຳອີກຕໍ່ໄປ ໄດ້ຖືກ ປ່ອຍໄປ.

๕ ແຕ່ຫລາຍຕໍ່ຫລາຍຄົນທີ່ບໍ່ໄດ້ເຂົ້າເຮັດພັນທະສັນຍາ, ແລະ ຄົນທີ່ຍັງມີຄວາມຄິດຄາດຕະກຳຢູ່ໃນໃຈຂອງພວກເຂົາ, ແທ້ຈິງ ແລ້ວ, ຫລາຍຕໍ່ຫລາຍຄົນທີ່ພົບເຫັນວ່າໃຊ້ຄຳເວົ້າຂົ່ມຂູ່ພີ່ນ້ອງ ຂອງຕົນຢູ່ ຈົ່ງໄດ້ຖືກຕັດສິນ ແລະ ລົງ�โทດຕາມກົດໝາຍ.

๖ ແລະ ດ້ວຍເຫດນີ້ພວກເຂົາຈົ່ງໄດ້ຢຸດການມົ້ວສຸມລັບອັນ ຊົ່ວຮ້າຍ ແລະ ໜ້າກຽດຊັງທັງໝົດ ຊຶ່ງໃນນັ້ນມີຄວາມຊົ່ວຮ້າຍ ຫລາຍ, ແລະ ການຄາດຕະກຳຢ່າງຫລວງຫລາຍ.

๗ ແລະ ປີທີ ຊາວສອງໄດ້ຜ່ານໄປດັ່ງນີ້, ແລະ ປີທີຊາວສາມນຳ ອີກ, ແລະ ປີທີຊາວສີ່, ແລະ ປີທີຊາວຫ້າ; ແລະ ເວລາຊາວຫ້າປີ ໄດ້ຜ່ານໄປດັ່ງນີ້.

3 Nephi 5

And now behold, there was not a living soul among all the people of the Nephites who did doubt in the least the words of all the holy prophets who had spoken; for they knew that it must needs be that they must be fulfilled.

And they knew that it must be expedient that Christ had come, because of the many signs which had been given, according to the words of the prophets; and because of the things which had come to pass already they knew that it must needs be that all things should come to pass according to that which had been spoken.

Therefore they did forsake all their sins, and their abominations, and their whoredoms, and did serve God with all diligence day and night.

And now it came to pass that when they had taken all the robbers prisoners, insomuch that none did escape who were not slain, they did cast their prisoners into prison, and did cause the word of God to be preached unto them; and as many as would repent of their sins and enter into a covenant that they would murder no more were set at liberty.

But as many as there were who did not enter into a covenant, and who did still continue to have those secret murders in their hearts, yea, as many as were found breathing out threatenings against their brethren were condemned and punished according to the law.

And thus they did put an end to all those wicked, and secret, and abominable combinations, in the which there was so much wickedness, and so many murders committed.

And thus had the twenty and second year passed away, and the twenty and third year also, and the twenty and fourth, and the twenty and fifth; and thus had twenty and five years passed away.

ຖ ແລະ ມີຫລາຍຢ່າງຫລາຍແນວເກີດຂຶ້ນ ຊຶ່ງໃນສາຍຕາຂອງ
ຄົນບາງຄົນເຫັນວ່າມັນເປັນເລື່ອງທີ່ຍິ່ງໃຫຍ່ ແລະ ໜ້າ
ອັດສະຈັນ; ເຖິງຢ່າງໃດກໍຕາມ, ເລື່ອງລາວທັງໝົດກໍບໍ່ສາມາດ
ທີ່ຈະເອົາມາຂຽນໄວ້ໃນໜັງສືເຫລັ້ມນີ້ໄດ້; ແທ້ຈິງແລ້ວ, ໜັງສື
ເຫລັ້ມນີ້ບໍ່ສາມາດບັນທຶກແມ່ນແຕ່ ໜຶ່ງສ່ວນຮ້ອຍຂອງສິ່ງທີ່
ເກີດຂຶ້ນໃນບັນດາຜູ້ຄົນຢ່າງຫລວງຫລາຍໃນໄລຍະຊາວຫ້າປີ
ຜ່ານມາ;

And there had many things transpired which, in the eyes of some, would be great and marvelous; nevertheless, they cannot all be written in this book; yea, this book cannot contain even a hundredth part of what was done among so many people in the space of twenty and five years;

ດ ແຕ່ຈົ່ງເບິ່ງ ມັນມີ ບັນທຶກ ຊຶ່ງມີເລື່ອງລາວຂອງຄວາມເປັນ
ມາທັງໝົດຂອງຜູ້ຄົນພວກນີ້; ແລະ ມັນເປັນເລື່ອງລາວທີ່ສັ້ນໆ
ແຕ່ເປັນຄວາມຈິງຊຶ່ງໃຫ້ໄວ້ໂດຍນີໄຟ.

But behold there are records which do contain all the proceedings of this people; and a shorter but true account was given by Nephi.

ຕ ສະນັ້ນ ຂ້າພະເຈົ້າຈຶ່ງໄດ້ເຮັດບັນທຶກຂອງຂ້າພະເຈົ້າກ່ຽວກັບ
ເລື່ອງເຫລົ່ານີ້, ຕາມບັນທຶກຂອງນີໄຟ ຊຶ່ງຖືກບັນທຶກໄວ້ໃນ
ແຜ່ນຈາລຶກທີ່ເອີ້ນວ່າ ແຜ່ນຈາລຶກຂອງນີໄຟ.

Therefore I have made my record of these things according to the record of Nephi, which was engraven on the plates which were called the plates of Nephi.

ຖ ແລະ ຈົ່ງເບິ່ງ, ຂ້າພະເຈົ້າກໍໄດ້ບັນທຶກໄວ້ໃນແຜ່ນຈາລຶກ ຊຶ່ງ
ຂ້າພະເຈົ້າໄດ້ເຮັດດ້ວຍມືຂອງຂ້າພະເຈົ້າເອງຄືກັນ.

And behold, I do make the record on plates which I have made with mine own hands.

ທ ແລະ ຈົ່ງເບິ່ງ, ຂ້າພະເຈົ້າຊື່ວ່າ ມໍມອນ, ໂດຍທີ່ຖືກເອີ້ນຕາມ
ແຜ່ນດິນມໍມອນ, ແຜ່ນດິນທີ່ແອວມາໄດ້ສະຖາປະນາ
ສາດສະໜາຈັກຂຶ້ນໃນບັນດາຜູ້ຄົນ, ແທ້ຈິງແລ້ວ, ມັນເປັນ
ສາດສະໜາຈັກແຫ່ງທຳອິດທີ່ຖືກສະຖາປະນາຂຶ້ນໃນບັນດາ
ພວກເຂົາ ຫລັງຈາກການລ່ວງລະເມີດຂອງພວກເຂົາ.

And behold, I am called Mormon, being called after the land of Mormon, the land in which Alma did establish the church among the people, yea, the first church which was established among them after their transgression.

ນ ຈົ່ງເບິ່ງ, ຂ້າພະເຈົ້າເປັນສານຸສິດຂອງພຣະເຢຊູຄຣິດ,
ພຣະບຸດຂອງພຣະເຈົ້າ. ຂ້າພະເຈົ້າໄດ້ຮັບການເອີ້ນຈາກ
ພຣະອົງ ໃຫ້ປະກາດພຣະຄຳໃນບັນດາຜູ້ຄົນຂອງພຣະອົງ,
ເພື່ອພວກເຂົາຈະໄດ້ມີຊີວິດອັນເປັນນິດ.

Behold, I am a disciple of Jesus Christ, the Son of God. I have been called of him to declare his word among his people, that they might have everlasting life.

ບ ແລະ ມັນຈຶ່ງເປັນການສົມຄວນທີ່ຂ້າພະເຈົ້າ, ຕາມ
ພຣະປະສົງຂອງພຣະເຈົ້າ, ຄວນເຮັດ ບັນທຶກກ່ຽວກັບສິ່ງທີ່
ເປັນມາເຫລົ່ານີ້ໄວ້, ເພື່ອໃຫ້ຄຳອະທິຖານຂອງຜູ້ທີ່ໄດ້ຈາກໄປ
ແລ້ວນັ້ນ ຊຶ່ງເປັນຜູ້ບໍລິສຸດ ໄດ້ຮັບຄວາມສຳເລັດຕາມສັດທາ
ຂອງພວກເຂົາ—

And it hath become expedient that I, according to the will of God, that the prayers of those who have gone hence, who were the holy ones, should be fulfilled according to their faith, should make a record of these things which have been done—

ບ ແທ້ຈິງແລ້ວ, ບັນທຶກເຫລັ້ມນ້ອຍຂອງເລື່ອງລາວທີ່ໄດ້
ເກີດຂຶ້ນນັບຕັ້ງແຕ່ເວລາທີ່ລີໄຮອອກມາຈາກເຢຣູຊາເລັມ, ຈົນ
ເຖິງເວລານີ້.

Yea, a small record of that which hath taken place from the time that Lehi left Jerusalem, even down until the present time.

ບ ສະນັ້ນ ຂ້າພະເຈົ້າຈຶ່ງໄດ້ເຮັດບັນທຶກຈາກເລື່ອງລາວຊຶ່ງຄົນທີ່
ຢູ່ມາກ່ອນຂ້າພະເຈົ້າໃຫ້ໄວ້, ຈົນຮອດຕອນຕົ້ນຂອງວັນເວລາ
ຂອງຂ້າພະເຈົ້າ;

Therefore I do make my record from the accounts which have been given by those who were before me, until the commencement of my day;

ບ ແລະ ແລ້ວຂ້າພະເຈົ້າກໍໄດ້ເຮັດ ບັນທຶກກ່ຽວກັບເລື່ອງທີ່
ຂ້າພະເຈົ້າໄດ້ເຫັນມາດ້ວຍຕາຂອງຂ້າພະເຈົ້າເອງ.

And then I do make a record of the things which I have seen with mine own eyes.

ຄ. ແລະ ຂ້າພະເຈົ້າຮູ້ວ່າ ບັນທຶກຊຶ່ງຂ້າພະເຈົ້າເຮັດໄວ້ນັ້ນເປັນ ບັນທຶກທີ່ຖືກຕ້ອງ ແລະ ເປັນຄວາມຈິງ; ເຖິງຢ່າງໃດກໍຕາມ ມັນຍັງມີອີກຫລາຍສິ່ງຫລາຍຢ່າງ ຊຶ່ງພວກເຮົາບໍ່ສາມາດຈະ ຂຽນໄວ້ໄດ້ຕາມພາສາຂອງພວກເຮົາ.

And I know the record which I make to be a just and a true record; nevertheless there are many things which, according to our language, we are not able to write.

ຄດ. ແລະ ບັດນີ້ຂ້າພະເຈົ້າຂໍຈົບການເວົ້າເຖິງຕົວຂອງຂ້າພະເຈົ້າ ເອງໄວ້ພຽງເທົ່ານີ້, ແລະ ຕໍ່ໄປນີ້ຈະເລີ່ມເລົ່າເລື່ອງລາວກ່ຽວກັບ ສິ່ງທີ່ເປັນມາກ່ອນຂ້າພະເຈົ້າ.

And now I make an end of my saying, which is of myself, and proceed to give my account of the things which have been before me.

ຄບ. ຂ້າພະເຈົ້າຄືມໍມອນ, ແລະ ເປັນຜູ້ສືບເຊື້ອສາຍໂດຍແທ້ຈິງ ຂອງລີໄຮ. ຂ້າພະເຈົ້າມີເຫດຜົນທີ່ຈະຖວາຍພອນແດ່ພຣະເຈົ້າ ແລະ ພຣະຜູ້ຊ່ວຍໃຫ້ລອດຂອງຂ້າພະເຈົ້າພຣະເຢຊູຄຣິດ, ທີ່ ພຣະອົງໄດ້ນຳພາບັນພະບຸລຸດຂອງພວກເຮົາອອກມາຈາກ ແຜ່ນດິນເຢຣູຊາເລັມ, (ແລະ ບໍ່ມີຜູ້ໃດຮູ້ຈັກເລື່ອງນີ້ເລີຍ ນອກຈາກພຣະອົງເອງ ແລະ ຜູ້ທີ່ພຣະອົງໄດ້ນຳອອກມາຈາກ ແຜ່ນດິນນັ້ນ) ແລະວ່າພຣະອົງໄດ້ປະທານຄວາມຮູ້ຢ່າງ ມະຫາສານໃຫ້ແກ່ຂ້າພະເຈົ້າ ແລະ ຜູ້ຄົນຂອງຂ້າພະເຈົ້າໄປສູ່ ຄວາມລອດແຫ່ງຈິດວິນຍານຂອງພວກເຮົາ.

I am Mormon, and a pure descendant of Lehi. I have reason to bless my God and my Savior Jesus Christ, that he brought our fathers out of the land of Jerusalem, (and no one knew it save it were himself and those whom he brought out of that land) and that he hath given me and my people so much knowledge unto the salvation of our souls.

ຄຄ. ພຣະອົງໄດ້ປະທານພອນໃຫ້ແກ່ ເຊື້ອສາຍຂອງ ຢາໂຄບໂດຍ ແນ່ແທ້, ແລະ ໄດ້ ເມດຕາລູກຫລານຂອງໂຢເຊັບ.

Surely he hath blessed the house of Jacob, and hath been merciful unto the seed of Joseph.

ຄດ. ແລະ ຕາບໃດທີ່ລູກຫລານຂອງລີໄຮຍັງຮັກສາພຣະບັນຍັດ ຂອງພຣະອົງຢູ່ ພຣະອົງໄດ້ປະທານພອນໃຫ້ແກ່ພວກເຂົາ ແລະ ເຮັດໃຫ້ພວກເຂົາຈະເລີນຮຸ່ງເຮືອງຕາມຄຳຂອງພຣະອົງ.

And insomuch as the children of Lehi have kept his commandments he hath blessed them and prospered them according to his word.

ຄບ. ແທ້ຈິງແລ້ວ, ແລະ ແນ່ນອນທີ່ສຸດ ພຣະອົງຈະເອົາ ສ່ວນໜຶ່ງ ທີ່ເຫລືອຢູ່ຂອງລູກຫລານຂອງໂຢເຊັບມາສູ່ ຄວາມຮູ້ເລື່ອງ ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງພວກເຂົາ.

Yea, and surely shall he again bring a remnant of the seed of Joseph to the knowledge of the Lord their God.

ຄຄ. ແລະ ຕາບໃດທີ່ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ຢ່າງແນ່ນອນ ສັນໃດ, ພຣະອົງຈະ ເຕົ້າໂຮມສ່ວນທີ່ເຫລືອຢູ່ທັງໝົດຂອງລູກ ຫລານຂອງຢາໂຄບ, ຈາກສີ່ສ່ວນຂອງແຜ່ນດິນໂລກເຂົ້າກັນ ສັນນັ້ນ ຊຶ່ງພວກເຂົາໄດ້ແຕກກະຈັດກະຈາຍໄປຕາມຜົນ ແຜ່ນດິນໂລກ.

And as surely as the Lord liveth, will he gather in from the four quarters of the earth all the remnant of the seed of Jacob, who are scattered abroad upon all the face of the earth.

ຄຄ. ແລະ ພຣະອົງໄດ້ເຮັດພັນທະສັນຍາໄວ້ກັບເຊື້ອສາຍຂອງ ຢາໂຄບທັງໝົດສັນໃດ, ພັນທະສັນຍາຊຶ່ງພຣະອົງໄດ້ເຮັດ ໄວ້ ກັບເຊື້ອສາຍຂອງຢາໂຄບຈະສຳເລັດໃນເວລາອັນເໝາະສົມຂອງ ພຣະອົງເອງສັນນັ້ນ, ຈົນເຖິງ ການນຳເອົາເຊື້ອສາຍຂອງ ຢາໂຄບທັງໝົດກັບມາຫາຄວາມຮູ້ເລື່ອງພັນທະສັນຍາທີ່ ພຣະອົງໄດ້ເຮັດໄວ້ກັບພວກເຂົາ.

And as he hath covenanted with all the house of Jacob, even so shall the covenant wherewith he hath covenanted with the house of Jacob be fulfilled in his own due time, unto the restoring all the house of Jacob unto the knowledge of the covenant that he hath covenanted with them.

ຄຜ. ແລະ ເມື່ອນັ້ນພວກເຂົາຈະ ຮູ້ຈັກພຣະຜູ້ໄຖ່ຂອງພວກເຂົາ, ຄື ພຣະເຢຊູຄຣິດພຣະບຸດຂອງພຣະເຈົ້າ; ແລະ ເມື່ອນັ້ນ ພວກເຂົາ ຈະຖືກເຕົ້າໂຮມຈາກສີ່ສ່ວນຂອງແຜ່ນດິນໂລກ, ເຂົ້າມາຫາ ແຜ່ນດິນຂອງພວກເຂົາເອງ ຊຶ່ງພວກເຂົາໄດ້ໜີຈາກໄປ; ແທ້ ຈິງແລ້ວ, ຕາບໃດທີ່ພຣະຜູ້ເປັນເຈົ້າຊົງພຣະຊົນຢູ່ສັນໃດ, ມັນກໍ ຈະເປັນໄປສັນນັ້ນ. ອາແມນ.

And then shall they know their Redeemer, who is Jesus Christ, the Son of God; and then shall they be gathered in from the four quarters of the earth unto their own lands, from whence they have been dispersed; yea, as the Lord liveth so shall it be. Amen.

ມ ນີໄຟ ຜ

3 Nephi 6

ມ ๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນຂອງນີໄຟທັງໝົດ ໄດ້ກັບຄືນໄປຫາແຜ່ນດິນຂອງພວກເຂົາເອງໃນປີທີຊາວຫົກ, ຜູ້ຊາຍທຸກຄົນ, ພ້ອມດ້ວຍຄອບຄົວຂອງພວກເຂົາ, ພ້ອມທັງຝູງສັດລ້ຽງຂອງພວກເຂົາ, ແລະ ຝູງສັດໃຊ້ແຮງງານຂອງພວກເຂົາ, ມ້າຂອງພວກເຂົາ ແລະ ງົວຂອງພວກເຂົາ, ແລະ ທຸກສິ່ງທຸກຢ່າງບໍ່ວ່າອັນໃດກໍຕາມທີ່ເປັນຂອງພວກເຂົາ.

And now it came to pass that the people of the Nephites did all return to their own lands in the twenty and sixth year, every man, with his family, his flocks and his herds, his horses and his cattle, and all things whatsoever did belong unto them.

๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາຍັງບໍ່ໄດ້ກິນ ສະບຽງອາຫານຂອງພວກເຂົາທັງໝົດເທື່ອ; ສະນັ້ນ ພວກເຂົາ ຈຶ່ງໄດ້ເອົາສິ່ງຂອງທີ່ຍັງບໍ່ທັນໄດ້ໃຊ້ທັງໝົດໄປກັບພວກເຂົາ, ຊຶ່ງມີເມັດພືດທຸກຊະນິດທັງໝົດຂອງພວກເຂົາ, ແລະ ຄຳຂອງ ພວກເຂົາ, ແລະ ເງິນຂອງພວກເຂົາ, ແລະ ຂອງມີຄ່າທັງໝົດ ຂອງພວກເຂົາ, ແລະ ພວກເຂົາໄດ້ກັບຄືນໄປຫາແຜ່ນດິນຂອງ ພວກເຂົາເອງ, ແລະ ສິ່ງຂອງ ຂອງພວກເຂົາເອງ, ທັງຢູ່ທາງ ເໜືອ ແລະ ຢູ່ທາງໃຕ້, ທັງໃນແຜ່ນດິນທາງເໜືອ ແລະ ໃນ ແຜ່ນດິນທາງໃຕ້.

And it came to pass that they had not eaten up all their provisions; therefore they did take with them all that they had not devoured, of all their grain of every kind, and their gold, and their silver, and all their precious things, and they did return to their own lands and their possessions, both on the north and on the south, both on the land northward and on the land southward.

๓ ແລະ ພວກເຂົາໄດ້ແບ່ງປັນທີ່ດິນໃຫ້ແກ່ພວກໂຈນເຫລົ່ານັ້ນ ທີ່ໄດ້ເຂົ້າເຮັດພັນທະສັນຍາວ່າຈະຮັກສາສັນຕິສຸກໃນແຜ່ນດິນ, ຜູ້ປາດຖະໜາເປັນຊາວເລມັນຢູ່ຕໍ່ໄປ, ຕາມຈຳນວນໜ້ອຍ ຫລາຍຂອງພວກເຂົາ, ເພື່ອພວກເຂົາຈະໄດ້ມີບ່ອນທຳມາຫາ ກິນ, ແລະ ພວກເຂົາໄດ້ສະຖາປະນາສັນຕິສຸກຂຶ້ນໃນທົ່ວ ແຜ່ນດິນດັ່ງນັ້ນ.

And they granted unto those robbers who had entered into a covenant to keep the peace of the land, who were desirous to remain Lamanites, lands, according to their numbers, that they might have, with their labors, wherewith to subsist upon; and thus they did establish peace in all the land.

๔ ແລະ ພວກເຂົາເລີ່ມຮຸ່ງເຮືອງ ແລະ ໃຫຍ່ຍິ່ງຂຶ້ນອີກ; ແລະ ປີ ທີຊາວຫົກ ແລະ ຊາວເຈັດໄດ້ຜ່ານໄປ, ແລະ ມັນມີຄວາມເປັນ ລະບຽບຮຽບຮ້ອຍຫລາຍໃນແຜ່ນດິນ; ແລະ ພວກເຂົາໄດ້ຕັ້ງ ກົດຂຶ້ນຕາມຄວາມເປັນທຳ ແລະ ຄວາມຍຸດຕິທຳ.

And they began again to prosper and to wax great; and the twenty and sixth and seventh years passed away, and there was great order in the land; and they had formed their laws according to equity and justice.

๕ ແລະ ບັດນີ້ບໍ່ມີສິ່ງໃດໃນທົ່ວແຜ່ນດິນທີ່ຈະຂັດຂວາງບໍ່ໃຫ້ ຜູ້ຄົນຈະເລີນຮຸ່ງເຮືອງຕະຫລອດໄປໄດ້, ເວັ້ນເສຍແຕ່ພວກເຂົາ ຈະຕົກໄປສູ່ການລ່ວງລະເມີດເທົ່ານັ້ນ.

And now there was nothing in all the land to hinder the people from prospering continually, except they should fall into transgression.

๖ ແລະ ບັດນີ້ແມ່ນກິດກິດໂດໄນ ແລະ ຜູ້ຕັດສິນເລໂດນິອັດ, ແລະ ພວກທີ່ຖືກແຕ່ງຕັ້ງໃຫ້ເປັນຜູ້ນຳ ເປັນຜູ້ສະຖາປະນາ ສັນຕິສຸກອັນຍິ່ງໃຫຍ່ຂຶ້ນໃນແຜ່ນດິນ.

And now it was Gidgiddoni, and the judge, Lachoneus, and those who had been appointed leaders, who had established this great peace in the land.

๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນໄດ້ມີຫລາຍເມືອງທີ່ຖືກ ສ້າງຂຶ້ນໃໝ່, ແລະ ຫລາຍເມືອງທີ່ເກົ່າແກ່ກໍໄດ້ຮັບການສ້ອມ ແຊມ.

And it came to pass that there were many cities built anew, and there were many old cities repaired.

๘ ແລະ ມັນມີການສ້າງທາງຫລວງຫລາຍສາຍ, ແລະ ຖະໜົນ ຫົນທາງຫລາຍສາຍ ຊຶ່ງນຳໄປຈາກເມືອງໜຶ່ງຫາອີກເມືອງ ໜຶ່ງ, ແລະ ຈາກແຜ່ນດິນໜຶ່ງໄປຫາອີກແຜ່ນດິນໜຶ່ງ, ແລະ ຈາກບ່ອນໜຶ່ງໄປຫາອີກບ່ອນໜຶ່ງ.

And there were many highways cast up, and many roads made, which led from city to city, and from land to land, and from place to place.

ດ ແລະ ປີທີຊາວແປດໄດ້ຜ່ານໄປ, ແລະ ຜູ້ຄົນກໍມີສັນຕິສຸກ ຕະຫລອດເວລາ.

And thus passed away the twenty and eighth year, and the people had continual peace.

ຊ ແຕ່ເຫດການໄດ້ບັງເກີດຂຶ້ນໃນປີທີຊາວເກົ້າ ມັນໄດ້ເລີ່ມ ມີການໂຕ້ຖຽງກັນເລັກໜ້ອຍໃນບັນດາຜູ້ຄົນ; ແລະ ມີບາງຄົນ ລະເມີເພີ້ຝັນດ້ວຍ ຄວາມທະນົງຕົວ ແລະ ການອວດອ້າງເພາະ ຂອງມີຄ່າຢ່າງຫລວງຫລາຍຂອງພວກເຂົາ, ແທ້ຈິງແລ້ວ, ຈົນ ນຳໄປສູ່ການຂົ່ມເຫັງອັນໃຫຍ່ຫລວງ.

But it came to pass in the twenty and ninth year there began to be some disputings among the people; and some were lifted up unto pride and boastings because of their exceedingly great riches, yea, even unto great persecutions;

ຍ ເພາະວ່າມັນໄດ້ມີພໍ່ຄ້າຢ່າງຫລວງຫລາຍໃນແຜ່ນດິນ, ແລະ ທະນາຍຄວາມຢ່າງຫລວງຫລາຍ, ແລະ ເຈົ້າໜ້າທີ່ຢ່າງ ຫລວງຫລາຍນຳອີກ.

For there were many merchants in the land, and also many lawyers, and many officers.

ຍດ ແລະ ຜູ້ຄົນເລີ່ມມີການແບ່ງຊັ້ນວັນນະກັນຂຶ້ນຕາມ ຄວາມ ຮັ່ງມີຂອງຕົນ, ແລະ ຕາມໂອກາດຂອງພວກເຂົາທີ່ໄດ້ຮຽນຮູ້; ແທ້ຈິງແລ້ວ, ບາງຄົນຂາດຄວາມຮູ້ ເພາະຄວາມຍາກຈົນຂອງ ພວກເຂົາ, ແລະ ຄົນອື່ນໆໄດ້ຮັບການສຶກສາຢ່າງກວ້າງຂວາງ ເພາະຄວາມຮັ່ງມີຂອງພວກເຂົາ.

And the people began to be distinguished by ranks, according to their riches and their chances for learning; yea, some were ignorant because of their poverty, and others did receive great learning because of their riches.

ຍດ.ນ ບາງຄົນໄດ້ລະເມີເພີ້ຝັນດ້ວຍຄວາມທະນົງຕົວ, ແລະ ບາງ ຄົນເປັນຄົນຖ່ອມຕົວທີ່ສຸດ; ບາງຄົນກໍໄດ້ໂຕ້ຖຽງກັນດ້ວຍສຽງ ປ້ອຍດ່າ, ໃນຂະນະທີ່ບາງຄົນຍອມຮັບການປ້ອຍດ່າ ແລະ ຍອມຮັບ ການຂົ່ມເຫັງ ແລະ ຄວາມທຸກນາໆປະການ, ແລະ ບໍ່ ຍອມໂຕ້ຄອບ ແລະ ໝິ່ນປະໝາດຄືນ, ມີແຕ່ຖ່ອມຕົວ ແລະ ສຳນຶກຜິດຕໍ່ພຣະພັກຂອງພຣະເຈົ້າ.

Some were lifted up in pride, and others were exceedingly humble; some did return railing for railing, while others would receive railing and persecution and all manner of afflictions, and would not turn and revile again, but were humble and penitent before God.

ຍດ.ສ ແລະ ມັນຈຶ່ງມີຄວາມບໍ່ສະເໝີພາບກັນໃນທົ່ວແຜ່ນດິນ, ເຖິງຂະໜາດທີ່ສາດສະໜາຈັກເລີ່ມແຕກແຍກ; ແທ້ຈິງແລ້ວ, ເຖິງຂະໜາດທີ່ສາດສະໜາຈັກໃນທົ່ວແຜ່ນດິນໄດ້ເລີ່ມຕົ້ນ ແຕກແຍກກັນໃນປີທີສາມສິບ ນອກຈາກໃນບັນດາຊາວເລມັນ ຈຳນວນໜ້ອຍໜຶ່ງຜູ້ທີ່ປ່ຽນໃຈເຫລື້ອມໃສມາສູ່ສັດທາທີ່ແທ້ ຈິງ; ແລະ ພວກເຂົາຈະບໍ່ຖິ້ມມັນໄປ ເພາະພວກເຂົາໝັ້ນຄົງ, ແລະ ແນ່ວແນ່, ແລະ ບໍ່ຫວັ່ນໄຫວ, ເຕັມໃຈທີ່ຈະຮັກສາ ພຣະບັນຍັດຂອງພຣະຜູ້ເປັນເຈົ້າດ້ວຍສຸດ ຄວາມພາກພຽນ.

And thus there became a great inequality in all the land, insomuch that the church began to be broken up; yea, insomuch that in the thirtieth year the church was broken up in all the land save it were among a few of the Lamanites who were converted unto the true faith; and they would not depart from it, for they were firm, and steadfast, and immovable, willing with all diligence to keep the commandments of the Lord.

ຍດ.ສ ບັດນີ້ສາເຫດຂອງຄວາມຊົ່ວຮ້າຍຂອງຜູ້ຄົນແມ່ນຄືແນວນີ້— ຊາຕານໄດ້ມີອຳນາດອັນຍິ່ງໃຫຍ່ໃນການຍຸຍົງໃຫ້ຜູ້ຄົນເຮັດ ຄວາມຊົ່ວຮ້າຍນາໆປະການ, ແລະ ເຮັດໃຫ້ພວກເຂົາຫລົງໄຫລ ດ້ວຍຄວາມທະນົງຕົວ, ລໍ້ລວງພວກເຂົາໃຫ້ສະແຫວງຫາ ອຳນາດ ແລະ ສິດອຳນາດ, ແລະ ຂອງມີຄ່າ, ແລະ ສິ່ງທີ່ບໍ່ມີ ປະໂຫຍດຂອງໂລກ.

Now the cause of this iniquity of the people was this—Satan had great power, unto the stirring up of the people to do all manner of iniquity, and to the puffing them up with pride, tempting them to seek for power, and authority, and riches, and the vain things of the world.

ຍດ.ວ ແລະ ຊາຕານໄດ້ຊັກນຳໃຈຂອງຜູ້ຄົນໃຫ້ເຮັດຄວາມຊົ່ວຮ້າຍ ນາໆປະການດັ່ງນີ້; ສະນັ້ນ ພວກເຂົາຈຶ່ງໄດ້ຊົ່ນຊົມຢູ່ກັບ ສັນຕິສຸກພຽງແຕ່ບໍ່ເທົ່າໃດປີເທົ່ານັ້ນ.

And thus Satan did lead away the hearts of the people to do all manner of iniquity; therefore they had enjoyed peace but a few years.

ແລະ ດ້ວຍເຫດນີ້, ໃນຕົ້ນປີທີສາມສິບ—ຜູ້ຄົນໄດ້ຖືກປະ
ປ່ອຍໄວ້ເປັນເວລາຄົນນານຢູ່ນຳ ການລໍ້ລວງຂອງມານຕາມແຕ່
ມັນປາດຖະໜາທີ່ຈະພາພວກເຂົາໄປ, ແລະ ໃຫ້ເຮັດຄວາມ
ຊົ່ວຮ້າຍຕາມແຕ່ມັນປາດຖະໜາທີ່ຈະໃຫ້ພວກເຂົາເຮັດ—ແລະ
ຕົ້ນປີທີສາມສິບນີ້, ຜູ້ຄົນຈຶ່ງໄດ້ຕົກຢູ່ໃນສະພາບແຫ່ງຄວາມ
ຊົ່ວຮ້າຍອັນເປັນຕາຢ້ານດັ່ງນີ້.

And thus, in the commencement of the thirtieth year—the people having been delivered up for the space of a long time to be carried about by the temptations of the devil whithersoever he desired to carry them, and to do whatsoever iniquity he desired they should—and thus in the commencement of this, the thirtieth year, they were in a state of awful wickedness.

ບັດນີ້ພວກເຂົາບໍ່ໄດ້ເຮັດບາບໂດຍ ບໍ່ຮູ້ເທົ່າເຖິງການ, ເພາະ
ພວກເຂົາຮູ້ຈັກເຖິງພຣະປະສົງຂອງພຣະເຈົ້າກ່ຽວກັບພວກ
ເຂົາ, ເພາະພວກເຂົາໄດ້ຮັບການສິດສອນມາແລ້ວ; ສະນັ້ນ
ພວກເຂົາຈຶ່ງໄດ້ ກະບົດຕໍ່ພຣະເຈົ້າໂດຍເຈດຕະນາ.

Now they did not sin ignorantly, for they knew the will of God concerning them, for it had been taught unto them; therefore they did wilfully rebel against God.

ແລະ ບັດນີ້ມັນເປັນໄປໃນວັນເວລາຂອງເລໂຄນິອັດຜູ້ເປັນລູກ
ຊາຍຂອງເລໂຄນິອັດ, ເພາະວ່າເລໂຄນິອັດໄດ້ຮັບຕຳແໜ່ງແທນ
ບິດາຂອງເພິ່ນ ແລະ ໄດ້ປົກຄອງຜູ້ຄົນໃນປີນັ້ນ.

And now it was in the days of Lachoneus, the son of Lachoneus, for Lachoneus did fill the seat of his father and did govern the people that year.

ແລະ ມັນເລີ່ມມີຄົນໄດ້ຮັບ ການດົນໃຈຈາກສະຫວັນ ແລະ
ຖືກສົ່ງໄປຫາບັນດາຜູ້ຄົນໃນທົ່ວແຜ່ນດິນເພື່ອສັ່ງສອນ ແລະ
ໃຫ້ຖ້ອຍຄຳຢ່າງອາດຫານເຖິງບາບ ແລະ ຄວາມຊົ່ວຮ້າຍຂອງ
ຜູ້ຄົນ, ແລະ ໄດ້ໃຫ້ຖ້ອຍຄຳແກ່ພວກເຂົາກ່ຽວກັບການໄຖ່, ຊຶ່ງ
ພຣະຜູ້ເປັນເຈົ້າຈະກະທຳເພື່ອຜູ້ຄົນຂອງພຣະອົງ, ຫລື ອີກຄຳ
ໜຶ່ງຄື ການຟື້ນຄືນພຣະຊົນຂອງພຣະຄຣິດ; ແລະ ເຂົາເຈົ້າໄດ້
ໃຫ້ຖ້ອຍຄຳຢ່າງອາດຫານເຖິງ ການສິ້ນພຣະຊົນ ແລະ ການ
ທຸກທໍລະມານຂອງພຣະອົງ.

And there began to be men inspired from heaven and sent forth, standing among the people in all the land, preaching and testifying boldly of the sins and iniquities of the people, and testifying unto them concerning the redemption which the Lord would make for his people, or in other words, the resurrection of Christ; and they did testify boldly of his death and sufferings.

ບັດນີ້ມັນໄດ້ມີຜູ້ຄົນຈຳນວນຫລວງຫລາຍທີ່ຄຽດແຄ້ນ
ຫລາຍທີ່ສຸດໃຫ້ແກ່ຜູ້ທີ່ໃຫ້ຖ້ອຍຄຳເຖິງເລື່ອງເຫລົ່ານີ້; ແລະ ຜູ້
ທີ່ຄຽດແຄ້ນນັ້ນສ່ວນຫລາຍເປັນພວກຫົວໜ້າຜູ້ຕັດສິນ, ແລະ
ພວກທີ່ ໄດ້ເປັນມະຫາປະໂລຫິດ ແລະ ພວກທະນາຍຄວາມ;
ແທ້ຈິງແລ້ວ, ພວກທະນາຍຄວາມທັງໝົດໄດ້ຄຽດແຄ້ນໃຫ້ແກ່
ຜູ້ທີ່ໃຫ້ຖ້ອຍຄຳເຖິງເລື່ອງເຫລົ່ານີ້.

Now there were many of the people who were exceedingly angry because of those who testified of these things; and those who were angry were chiefly the chief judges, and they who had been high priests and lawyers; yea, all those who were lawyers were angry with those who testified of these things.

ບັດນີ້ບໍ່ມີທະນາຍຄວາມ ຫລື ວ່າຜູ້ຕັດສິນ ຫລື ວ່າມະຫາ
ປະໂລຫິດຄົນໃດທີ່ຈະມີອຳນາດກ່າວໂທດຜູ້ໃດເຖິງຕາຍໄດ້
ນອກຈາກຜູ້ປົກຄອງແຜ່ນດິນຈະເປັນຜູ້ລົງຊື່ໃນການກ່າວໂທດ
ນັ້ນເທົ່ານັ້ນ.

Now there was no lawyer nor judge nor high priest that could have power to condemn any one to death save their condemnation was signed by the governor of the land.

ບັດນີ້ມີຫລາຍຄົນໃນພວກທີ່ໃຫ້ຖ້ອຍຄຳເຖິງເລື່ອງທີ່
ກ່ຽວກັບພຣະຄຣິດ ຜູ້ທີ່ໄດ້ໃຫ້ຖ້ອຍຄຳຢ່າງອາດຫານໄດ້ຖືກ
ພວກຜູ້ຕັດສິນຈັບໄປ ແລະ ຂ້າຢ່າງລັບໆ ເພື່ອການຕາຍຂອງ
ພວກເພິ່ນຈະບໍ່ໄດ້ຮູ້ໄປເຖິງຜູ້ປົກຄອງແຜ່ນດິນ ຈົນກວ່າ
ຫລັງຈາກພວກເພິ່ນຕາຍໄປແລ້ວ.

Now there were many of those who testified of the things pertaining to Christ who testified boldly, who were taken and put to death secretly by the judges, that the knowledge of their death came not unto the governor of the land until after their death.

ບັດນີ້ຈົ່ງເບິ່ງ, ນີ້ເປັນສິ່ງກົງກັນຂ້າມກັບກົດໝາຍຂອງ
ບ້ານເມືອງທີ່ຈະລົງໂທດປະຫານຊີວິດຄົນໃດຕາມໃຈຊອບ ເວັ້ນ
ໄວ້ແຕ່ພວກເຂົາຈະໄດ້ຮັບອຳນາດຈາກຜູ້ປົກຄອງແຜ່ນດິນເສຍ
ກ່ອນ—

Now behold, this was contrary to the laws of the land, that any man should be put to death except they had power from the governor of the land—

ຂ ສະນັ້ນ ມັນຈຶ່ງມີໃບຄຳຮ້ອງຂຶ້ນໄປຫາແຜ່ນດິນເຊຣາເຮັມລາ, ເຖິງຜູ້ປົກຄອງແຜ່ນດິນເພື່ອກ່າວຟ້ອງຜູ້ຕັດສິນເຫລົ່ານີ້ທີ່ໄດ້ກ່າວໂທດສາດສະດາຂອງພຣະຜູ້ເປັນເຈົ້າຈົນເຖິງແກ່ຄວາມຕາຍ, ຊຶ່ງມັນບໍ່ເປັນໄປຕາມກົດໝາຍ.

ຂ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາຈຶ່ງໄດ້ຖືກຈັບ ແລະ ຖືກນຳໄປຢູ່ຕໍ່ໜ້າຜູ້ຕັດສິນ, ເພື່ອຮັບການຕັດສິນຕາມຄວາມຜິດທີ່ພວກເຂົາໄດ້ເຮັດໄປນັ້ນຕາມ ກົດໝາຍຊຶ່ງຜູ້ຄົນໄດ້ຕັ້ງໄວ້.

ຂ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຜູ້ຕັດສິນເຫລົ່ານີ້ ມີເພື່ອນຝູງ ແລະ ຍາດພີ່ນ້ອງຫລາຍຄົນ; ແລະ ພວກທີ່ເຫລືອຢູ່, ແທ້ຈິງແລ້ວ, ພວກທະນາຍຄວາມ ແລະ ພວກມະຫາປະໂລຫິດເກືອບໝົດທຸກຄົນໄດ້ຮ່ວມມືເຂົ້າກັບຍາດພີ່ນ້ອງຂອງພວກຜູ້ຕັດສິນເຫລົ່ານັ້ນ ຜູ້ທີ່ໄດ້ຖືກພິຈາລະນາໂທດຕາມກົດໝາຍ.

ຂ ແລະ ພວກເຂົາໄດ້ເຂົ້າເຮັດ ພັນທະສັນຍາຮ່ວມກັນ, ແທ້ຈິງແລ້ວ, ເປັນພັນທະສັນຍາ ຊຶ່ງຄົນແຕ່ເກົ່າກ່ອນໃຫ້ໄວ້ ຊຶ່ງພັນທະສັນຍານັ້ນ ມານໄດ້ໃຫ້ໄວ້, ເພື່ອຈະໄດ້ຮ່ວມຫົວກັນຕໍ່ສູ້ກັບຄວາມຊອບທຳທັງມວນ.

ຂ ສະນັ້ນ ພວກເຂົາຈຶ່ງໄດ້ຮ່ວມຫົວກັນຕໍ່ສູ້ກັບຜູ້ຄົນຂອງພຣະຜູ້ເປັນເຈົ້າ, ແລະ ເຂົ້າເຮັດພັນທະສັນຍາເພື່ອຈະໄດ້ທຳລາຍຜູ້ຄົນທີ່ຊອບທຳເຫລົ່ານັ້ນ, ເພື່ອຊ່ວຍເຫລືອພວກທີ່ມີຄວາມຜິດຖານຄາດຕະກຳ ໃຫ້ພົ້ນຈາກເງື້ອມມືຂອງຄວາມຍຸດຕິທຳ, ຊຶ່ງກຳລັງຈະອອກໃຊ້ຕາມກົດໝາຍ.

ມ ແລະ ພວກເຂົາໄດ້ຕໍ່ຕ້ານກົດໝາຍ ແລະ ສິດທິຂອງປະເທດຊາດຂອງພວກເຂົາ; ແລະ ພວກເຂົາໄດ້ເຮັດພັນທະສັນຍາຮ່ວມກັນເພື່ອທຳລາຍຜູ້ປົກຄອງແຜ່ນດິນ, ແລະ ເພື່ອແຕ່ງຕັ້ງ ກະສັດຂຶ້ນປົກຄອງແຜ່ນດິນ, ເພື່ອແຜ່ນດິນຈະບໍ່ໄດ້ມີເສລີພາບອີກຕໍ່ໄປ ແຕ່ຈະຂຶ້ນກັບກະສັດ.

Therefore a complaint came up unto the land of Zarahemla, to the governor of the land, against these judges who had condemned the prophets of the Lord unto death, not according to the law.

Now it came to pass that they were taken and brought up before the judge, to be judged of the crime which they had done, according to the law which had been given by the people.

Now it came to pass that those judges had many friends and kindreds; and the remainder, yea, even almost all the lawyers and the high priests, did gather themselves together, and unite with the kindreds of those judges who were to be tried according to the law.

And they did enter into a covenant one with another, yea, even into that covenant which was given by them of old, which covenant was given and administered by the devil, to combine against all righteousness.

Therefore they did combine against the people of the Lord, and enter into a covenant to destroy them, and to deliver those who were guilty of murder from the grasp of justice, which was about to be administered according to the law.

And they did set at defiance the law and the rights of their country; and they did covenant one with another to destroy the governor, and to establish a king over the land, that the land should no more be at liberty but should be subject unto kings.

ນີ ນີໄຟ ๗

๑ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າຈະສະແດງແກ່ພວກທ່ານວ່າ ພວກ
ເຂົາບໍ່ໄດ້ແຕ່ງຕັ້ງໃຫ້ມີກະສັດປົກຄອງແຜ່ນດິນ; ແຕ່ໃນປີ
ດຽວກັນນັ້ນ, ແທ້ຈິງແລ້ວ, ໃນປີທີສາມສິບ, ພວກເຂົາໄດ້
ທຳລາຍບັນລັງຕັດສິນ, ແທ້ຈິງແລ້ວ, ໄດ້ລອບຂ້າຫົວໜ້າຜູ້
ຕັດສິນຂອງແຜ່ນດິນ.

๘ ແລະ ຜູ້ຄົນໄດ້ແບ່ງແຍກເປັນສັດຕູກັນ; ແລະ ພວກເຂົາໄດ້
ແບ່ງແຍກກັນອອກເປັນຫລາຍເຜົ່າ, ຕາມຄອບຄົວ ແລະ ຍາດ
ພີ່ນ້ອງ ແລະ ເພື່ອນຝູງຂອງພວກເຂົາ; ແລະ ພວກເຂົາໄດ້
ທຳລາຍການປົກຄອງຂອງແຜ່ນດິນດັ່ງນີ້.

๙ ແລະ ແຕ່ລະເຜົ່າກໍໄດ້ແຕ່ງຕັ້ງໃຫ້ມີຫົວໜ້າ ຫລື ຜູ້ດູແລ
ພວກເຂົາ; ແລະ ພວກເຂົາຈຶ່ງກັບເປັນເຜົ່າຕ່າງໆ ແລະ ເປັນ
ຫົວໜ້າເຜົ່າດັ່ງນີ້.

๑๐ ບັດນີ້ຈົ່ງເບິ່ງ, ບໍ່ມີຜູ້ໃດໃນບັນດາພວກເຂົາທີ່ບໍ່ມີຄອບຄົວ
ໃຫຍ່ ແລະ ຍາດພີ່ນ້ອງ ແລະ ເພື່ອນຝູງຫລາຍຄົນ; ສະນັ້ນ ເຜົ່າ
ຂອງພວກເຂົາຈຶ່ງແຜ່ຂະຫຍາຍຢ່າງກວ້າງຂວາງ.

๑๑ ບັດນີ້ທັງໝົດນີ້ເປັນໄປ ແລະ ຍັງບໍ່ທັນມີສົງຄາມເກີດຂຶ້ນໃນ
ບັນດາພວກເຂົາເທື່ອ; ແລະ ຄວາມຊົ່ວຮ້າຍທັງໝົດນີ້ມາສູ່
ຜູ້ຄົນ ເພາະພວກເຂົາໄດ້ ຍອມຕົວໃຫ້ກັບອຳນາດຂອງຊາຕານ.

๑๒ ແລະ ຂໍ້ບັງຄັບຂອງຝ່າຍຜູ້ປົກຄອງໄດ້ຖືກທຳລາຍໄປ, ເພາະ
ຄວາມມົ້ວສຸມລັບຂອງເພື່ອນຝູງ ແລະ ຍາດພີ່ນ້ອງຂອງພວກ
ທີ່ຂ້າສາດສະດາ.

๑๓ ແລະ ພວກເຂົາໄດ້ເຮັດໃຫ້ເກີດການຂັດແຍ້ງອັນໃຫຍ່ຫລວງ
ໃນແຜ່ນດິນ, ເຖິງຂະໜາດທີ່ຜູ້ຄົນທີ່ຊອບທຳເກືອບຈະກາຍ
ມາເປັນຄົນຊົ່ວໄປຈົນໝົດ; ແທ້ຈິງແລ້ວ, ຍັງມີແຕ່ຄົນທີ່
ຊອບທຳຢູ່ພຽງບໍ່ເທົ່າໃດຄົນເທົ່ານັ້ນໃນບັນດາພວກເຂົາ.

๑๔ ແລະ ເວລາຫົກປີຍັງບໍ່ທັນໄດ້ຜ່ານໄປເທື່ອນັບແຕ່ຄົນສ່ວນ
ຫລາຍໄດ້ຫັນໄປຈາກຄວາມຊອບທຳຂອງພວກເຂົາ, ຄືກັນກັບ
ໝາກິນສິ່ງທີ່ມັນ ຮາກອອກມາ, ຫລື ຄືກັນກັບໝູທີ່ລ້າງແລ້ວ
ລົງໄປນອນລຸຍຢູ່ໃນບວກອີກ.

๑๕ ບັດນີ້ກຸ່ມມົ້ວສຸມລັບນີ້, ຊຶ່ງນຳຄວາມຊົ່ວຮ້າຍອັນໃຫຍ່ຫລວງ
ມາສູ່ຜູ້ຄົນ, ໄດ້ມາເຕົ້າໂຮມກັນ ແລະ ໄດ້ຕັ້ງຄົນຜູ້ໜຶ່ງຂຶ້ນເປັນ
ຫົວໜ້າຂອງພວກເຂົາ ຜູ້ທີ່ພວກເຂົາເອີ້ນວ່າ ຢາໂຄບ;

๑๖ ແລະ ພວກເຂົາໄດ້ເອີ້ນລາວວ່າເປັນກະສັດຂອງພວກເຂົາ;
ສະນັ້ນ ລາວຈຶ່ງໄດ້ກາຍມາເປັນກະສັດປົກຄອງຄົນຊົ່ວກຸ່ມນີ້;
ແລະ ລາວເປັນຄົນສຳຄັນທີ່ສຸດຄົນໜຶ່ງທີ່ໄດ້ອອກສຽງຕໍ່ຕ້ານ
ສາດສະດາ ຜູ້ຊຶ່ງໃຫ້ຖ້ອຍຄຳເຖິງພຣະເຢຊູ.

3 Nephi 7

Now behold, I will show unto you that they did not establish a king over the land; but in this same year, yea, the thirtieth year, they did destroy upon the judgment-seat, yea, did murder the chief judge of the land.

And the people were divided one against another; and they did separate one from another into tribes, every man according to his family and his kindred and friends; and thus they did destroy the government of the land.

And every tribe did appoint a chief or a leader over them; and thus they became tribes and leaders of tribes.

Now behold, there was no man among them save he had much family and many kindreds and friends; therefore their tribes became exceedingly great.

Now all this was done, and there were no wars as yet among them; and all this iniquity had come upon the people because they did yield themselves unto the power of Satan.

And the regulations of the government were destroyed, because of the secret combination of the friends and kindreds of those who murdered the prophets.

And they did cause a great contention in the land, insomuch that the more righteous part of the people had nearly all become wicked; yea, there were but few righteous men among them.

And thus six years had not passed away since the more part of the people had turned from their righteousness, like the dog to his vomit, or like the sow to her wallowing in the mire.

Now this secret combination, which had brought so great iniquity upon the people, did gather themselves together, and did place at their head a man whom they did call Jacob;

And they did call him their king; therefore he became a king over this wicked band; and he was one of the chiefest who had given his voice against the prophets who testified of Jesus.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາບໍ່ມີຈຳນວນຄົນ
ຫລາຍເທົ່າກັບເຜົ່າຕ່າງໆ, ຜູ້ໄດ້ຮ່ວມເຂົ້າກັນເປັນໜຶ່ງ ແຕ່
ພວກຫົວໜ້າຂອງພວກເຂົາໄດ້ຕັ້ງກົດຂຶ້ນ, ແຕ່ລະຄົນຕາມເຜົ່າ
ຂອງຕົນເອງ; ເຖິງຢ່າງໃດກໍຕາມພວກເຂົາກໍຍັງເປັນສັດຕູກັນ
ຢູ່; ເຖິງແມ່ນວ່າພວກເຂົາບໍ່ໄດ້ເປັນຄົນຊອບທຳ, ແຕ່ພວກເຂົາ
ກໍໄດ້ເຂົ້າຮ່ວມກັນກຽດຊັງພວກທີ່ໄດ້ເຂົ້າເຮັດພັນທະສັນຍາ
ເພື່ອທຳລາຍຝ່າຍຜູ້ປົກຄອງ.

And it came to pass that they were not so strong in number as the tribes of the people, who were united together save it were their leaders did establish their laws, every one according to his tribe; nevertheless they were enemies; notwithstanding they were not a righteous people, yet they were united in the hatred of those who had entered into a covenant to destroy the government.

ສະນັ້ນ, ຢາໂຄບໂດຍທີ່ເຫັນວ່າສັດຕູມີຈຳນວນຫລາຍກວ່າ
ພວກຕົນ, ໂດຍທີ່ລາວເອງເປັນກະສັດຂອງກຸ່ມນັ້ນ, ສະນັ້ນ
ລາວຈຶ່ງໄດ້ສັ່ງໃຫ້ຜູ້ຄົນຂອງລາວໜີໄປຫາຂົງເຂດທີ່ຢູ່ເໜືອສຸດ
ຂອງແຜ່ນດິນທາງເໜືອ, ແລະ ຢູ່ທີ່ນັ້ນຈະໄດ້ສ້າງ ອານາຈັກຂຶ້ນ
ເພື່ອພວກເຂົາເອງ, ຈົນວ່າມີພວກທີ່ແຍກອອກໄປຮ່ວມກັບ
ພວກເຂົາ, (ເພາະຢາໂຄບໄດ້ເວົ້າຍຸຍົງພວກເຂົາວ່າ ມັນຈະມີ
ຜູ້ຄົນແຍກອອກໄປຮ່ວມເປັນຈຳນວນຫລວງຫລາຍ) ແລະ
ພວກເຂົາກັບມາມີກຳລັງພຽງພໍທີ່ຈະຕໍ່ສູ້ກັບຜູ້ຄົນຂອງເຜົ່າ
ຕ່າງໆ; ແລະ ພວກເຂົາໄດ້ເຮັດເຊັ່ນນີ້.

Therefore, Jacob seeing that their enemies were more numerous than they, he being the king of the band, therefore he commanded his people that they should take their flight into the northernmost part of the land, and there build up unto themselves a kingdom, until they were joined by dissenters, (for he flattered them that there would be many dissenters) and they become sufficiently strong to contend with the tribes of the people; and they did so.

ແລະ ການເດີນທັບຂອງພວກເຂົານັ້ນວ່ອງໄວທີ່ສຸດ ເຖິງ
ຂະໜາດທີ່ບໍ່ມີສິ່ງໃດຈະຂັດຂວາງພວກເຂົາໄດ້ ຈົນວ່າພວກເຂົາ
ໄດ້ອອກໄປພົ້ນຈາກໄລຍະທີ່ຜູ້ຄົນຈະຕາມມາທັນ. ແລະ ປີທີ
ສາມສິບໄດ້ສິ້ນສຸດລົງດັ່ງນີ້; ແລະ ການງານຂອງຜູ້ຄົນຂອງນີ
ໄຟກໍເປັນໄປດັ່ງນີ້.

And so speedy was their march that it could not be impeded until they had gone forth out of the reach of the people. And thus ended the thirtieth year; and thus were the affairs of the people of Nephi.

ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີສາມສິບເອັດຄື ພວກ
ເຂົາໄດ້ແບ່ງແຍກອອກເປັນຫລາຍເຜົ່າ, ທຸກຄົນຕາມຄອບຄົວ,
ຍາດພີ່ນ້ອງ ແລະ ເພື່ອນຝູງຂອງເຂົາ; ເຖິງຢ່າງໃດກໍຕາມ
ພວກເຂົາຍັງໄດ້ຕົກລົງກັນວ່າ ພວກເຂົາຈະບໍ່ເຮັດສົງຄາມ
ຕໍ່ຕ້ານກັນ, ແຕ່ພວກເຂົາບໍ່ໄດ້ເປັນໜຶ່ງເລື່ອງກົດໝາຍ ແລະ
ລະບຽບການປົກຄອງຂອງພວກເຂົາ ເພາະພວກເຂົາໄດ້ຕັ້ງກົດ
ຂຶ້ນຕາມຄວາມຄິດເຫັນຂອງຜູ້ທີ່ເປັນຫົວໜ້າ ແລະ ຜູ້ນຳຂອງ
ພວກເຂົາ. ແຕ່ວ່າພວກເຂົາໄດ້ຕັ້ງກົດເຄັ່ງຄັດທີ່ສຸດຂຶ້ນວ່າ ບໍ່ໃຫ້
ແຕ່ລະເຜົ່າລ່ວງລະເມີດຊຶ່ງກັນແລະກັນ, ເຖິງຂະໜາດທີ່ມັນໄດ້
ມີສັນຕິສຸກຢູ່ໃນແຜ່ນດິນພໍສົມຄວນ; ເຖິງຢ່າງໃດກໍຕາມ, ໃຈ
ຂອງພວກເຂົາໄດ້ຫັນເຫໄປຈາກພຣະຜູ້ເປັນເຈົ້າອົງເປັນ
ພຣະເຈົ້າຂອງພວກເຂົາ, ແລະ ພວກເຂົາໄດ້ແກວ່ງກ້ອນຫີນໃສ່
ສາດສະດາ, ແລະ ໄດ້ຂັບໄລ່ພວກເພີ່ນອອກໄປຈາກບັນດາ
ພວກເຂົາ.

And it came to pass in the thirty and first year that they were divided into tribes, every man according to his family, kindred and friends; nevertheless they had come to an agreement that they would not go to war one with another; but they were not united as to their laws, and their manner of government, for they were established according to the minds of those who were their chiefs and their leaders. But they did establish very strict laws that one tribe should not trespass against another, insomuch that in some degree they had peace in the land; nevertheless, their hearts were turned from the Lord their God, and they did stone the prophets and did cast them out from among them.

ແລະ ເຫດການໄດ້ບັງເກີດຂຶ້ນຄື ນີໄຟ—ໂດຍທີ່ໄດ້ຮັບການ
ມາຢ້ຽມຢາມຈາກເຫລົ່າທູດ ແລະ ໄດ້ຍິນສຸລະສຽງຂອງ
ພຣະເຈົ້ານຳອີກ, ສະນັ້ນ ນີໄຟຈຶ່ງໄດ້ເຫັນເຫລົ່າທູດ, ແລະ ເປັນ
ພະຍານດ້ວຍຕາ, ແລະ ມີອຳນາດທີ່ຖືກປະທານໃຫ້ແກ່ເພິ່ນ
ເພື່ອເພິ່ນຈະໄດ້ຮູ້ຈັກກ່ຽວກັບການປະຕິບັດສາດສະໜາກິດ
ຂອງພຣະຄຣິດ, ແລະ ເປັນພະຍານດ້ວຍຕາ ເຖິງການຫັນເຫ
ຢ່າງວ່ອງໄວຈາກຄວາມຊອບທຳໄປສູ່ຄວາມຊົ່ວຮ້າຍ ແລະ
ຄວາມໜ້າກຽດຊັງຂອງພວກເຂົານຳອີກ;

ສະນັ້ນ, ໂດຍທີ່ມີຄວາມໂສກເສົ້າ ເພາະຄວາມແຂງກະດ້າງ
ຂອງໃຈຂອງພວກເຂົາ ແລະ ຄວາມບອດຂອງຈິດໃຈຂອງພວກ
ເຂົາ—ຈຶ່ງໄດ້ອອກໄປໃນປີດຽວກັນນັ້ນ, ແລະ ເລີ່ມໃຫ້ຖ້ອຍຄຳ
ຢ່າງອາດຫານເລື່ອງການກັບໃຈ ແລະ ການປົດບາບຜ່ານ
ສັດທາໃນອົງພຣະເຢຊູຄຣິດເຈົ້າ.

ແລະ ເພິ່ນໄດ້ປະຕິບັດສາດສະໜາກິດຫລາຍຢ່າງແກ່ພວກ
ເຂົາ; ແລະ ບໍ່ສາມາດຂຽນເລື່ອງທັງໝົດໄວ້ໄດ້, ແລະ ຖ້າຈະ
ຂຽນສ່ວນໜຶ່ງໄວ້ກໍຈະບໍ່ຄົບຖ້ວນ, ສະນັ້ນ ມັນຈຶ່ງບໍ່ໄດ້ຖືກຂຽນ
ໄວ້ເລີຍໃນໜັງສືເຫລັ້ມນີ້. ແລະ ນີໄຟໄດ້ປະຕິບັດສາດສະໜາ
ກິດດ້ວຍ ອຳນາດ ແລະ ດ້ວຍສິດອຳນາດອັນຍິ່ງໃຫຍ່.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຂົາໄດ້ຄຽດແຄ້ນໃຫ້
ເພິ່ນ, ເພາະເພິ່ນມີອຳນາດຫລາຍກວ່າພວກເຂົາ, ເພາະມັນ
ເປັນໄປ ບໍ່ໄດ້ທີ່ພວກເຂົາຈະບໍ່ເຊື່ອຄຳເວົ້າຂອງເພິ່ນ, ເພາະ
ສັດທາຂອງເພິ່ນໃນອົງພຣະເຢຊູຄຣິດເຈົ້ານັ້ນໃຫຍ່ຍິ່ງທີ່ສຸດຈົນ
ວ່າເຫລົ່າທູດໄດ້ມາປະຕິບັດແກ່ເພິ່ນທຸກໆມື້.

ແລະ ໃນພຣະນາມຂອງພຣະເຢຊູ ເພິ່ນໄດ້ຂັບໄລ່ພວກຜີ
ສາງ ແລະ ວິນຍານອັນບໍ່ສະອາດອອກໄປ; ແລະ ເຖິງຂະໜາດທີ່
ເພິ່ນໄດ້ໂສດຍົກນ້ອງຊາຍຂອງເພິ່ນຂຶ້ນຈາກຕາຍ, ຫລັງຈາກທີ່
ລາວຖືກຜູ້ຄົນແກວ່ງກ້ອນຫີນໃສ່ຈົນເຖິງແກ່ຄວາມຕາຍ.

ແລະ ຜູ້ຄົນໄດ້ເຫັນເຫດການນີ້ ແລະ ໄດ້ເປັນພະຍານເຖິງ
ເລື່ອງນີ້, ແລະ ໄດ້ຄຽດແຄ້ນໃຫ້ເພິ່ນຍ້ອນອຳນາດຂອງເພິ່ນ;
ແລະ ເພິ່ນໄດ້ເຮັດສິ່ງມະຫັດສະຈັນອີກ ຫລາຍຢ່າງໃນພຣະ
ນາມຂອງພຣະເຢຊູຕໍ່ສາຍຕາຂອງຜູ້ຄົນນຳອີກ.

ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີສາມສິບເອັດໄດ້
ຜ່ານພົ້ນໄປ, ແລະ ມີຄົນບໍ່ເທົ່າໃດຄົນທີ່ປ່ຽນໃຈເຫລື້ອມໃສໃນ
ພຣະຜູ້ເປັນເຈົ້າ; ແຕ່ຫລາຍຕໍ່ຫລາຍຄົນທີ່ປ່ຽນໃຈເຫລື້ອມໃສ
ໄດ້ສະແດງຕໍ່ຜູ້ຄົນໂດຍແທ້ຈິງວ່າ ພວກເຂົາໄດ້ຖືກຢ້ຽມຢາມ
ໂດຍອຳນາດ ແລະ ພຣະວິນຍານຂອງພຣະເຈົ້າຊຶ່ງສະຖິດຢູ່ໃນ
ພຣະເຢຊູຄຣິດ, ຊຶ່ງໃນພຣະອົງພວກເຂົາເຊື່ອຖື.

And it came to pass that Nephi—having been visited by angels and also the voice of the Lord, therefore having seen angels, and being eye-witness, and having had power given unto him that he might know concerning the ministry of Christ, and also being eye-witness to their quick return from righteousness unto their wickedness and abominations;

Therefore, being grieved for the hardness of their hearts and the blindness of their minds—went forth among them in that same year, and began to testify, boldly, repentance and remission of sins through faith on the Lord Jesus Christ.

And he did minister many things unto them; and all of them cannot be written, and a part of them would not suffice, therefore they are not written in this book. And Nephi did minister with power and with great authority.

And it came to pass that they were angry with him, even because he had greater power than they, for it were not possible that they could disbelieve his words, for so great was his faith on the Lord Jesus Christ that angels did minister unto him daily.

And in the name of Jesus did he cast out devils and unclean spirits; and even his brother did he raise from the dead, after he had been stoned and suffered death by the people.

And the people saw it, and did witness of it, and were angry with him because of his power; and he did also do many more miracles, in the sight of the people, in the name of Jesus.

And it came to pass that the thirty and first year did pass away, and there were but few who were converted unto the Lord; but as many as were converted did truly signify unto the people that they had been visited by the power and Spirit of God, which was in Jesus Christ, in whom they believed.

ຜ

ແລະ ຫລາຍຕໍ່ຫລາຍຄົນທີ່ໄດ້ຮັບການຂັບໄລ່ຜີສາງອອກ ຈາກຕົວຂອງພວກເຂົາ, ແລະ ໄດ້ຮັບການປິ່ນປົວຈາກຄວາມ ເຈັບໄຂ້ໄດ້ປ່ວຍຂອງພວກເຂົາ ແລະ ຄວາມບໍ່ຢູ່ດີມີແຮງຂອງ ພວກເຂົານັ້ນ, ໄດ້ປະກາດແກ່ຜູ້ຄົນໂດຍແທ້ຈິງວ່າ ພວກເຂົາໄດ້ ຮັບການປິ່ນປົວໂດຍພຣະວິນຍານຂອງພຣະເຈົ້າ, ແລະ ໄດ້ຫາຍ ດີເປັນປົກກະຕິແລ້ວ; ແລະ ພວກເຂົາໄດ້ສະແດງເຄື່ອງໝາຍໃຫ້ ປະຈັກນຳອີກ ແລະ ໄດ້ເຮັດສິ່ງມະຫັດສະຈັນຫລາຍຢ່າງໃນ ບັນດາຜູ້ຄົນ.

And as many as had devils cast out from them, and were healed of their sicknesses and their infirmities, did truly manifest unto the people that they had been wrought upon by the Spirit of God, and had been healed; and they did show forth signs also and did do some miracles among the people.

ຜ

ປີທີສາມສິບສອງກໍໄດ້ຜ່ານໄປດັ່ງນີ້. ແລະ ນີໄຟໄດ້ຮ້ອງປ່າວ ຕໍ່ຜູ້ຄົນໃນຕົ້ນປີທີສາມສິບສາມ; ແລະ ເພິ່ນໄດ້ສັ່ງສອນເລື່ອງ ການກັບໃຈ ແລະ ການປົດບາບໃຫ້ແກ່ພວກເຂົາ.

Thus passed away the thirty and second year also. And Nephi did cry unto the people in the commencement of the thirty and third year; and he did preach unto them repentance and remission of sins.

ຜ

ບັດນີ້ຂ້າພະເຈົ້າຢາກໃຫ້ທ່ານຈື່ຈຳໄວ້ນຳອີກວ່າ ບໍ່ມີຜູ້ໃດເລີຍ ທີ່ໄດ້ຮັບການນຳມາສູ່ການກັບໃຈໂດຍປາດສະຈາກ ການ ບັບຕິສະມາດ້ວຍນ້ຳ.

๑๘	ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພຣະເຢຊູຈົບການອະທິຖານຫາພຣະບິດາແລ້ວ, ພຣະອົງກຳລຸກຂຶ້ນ; ແຕ່ ຄວາມສຸກຂອງຝູງຊົນນັ້ນຍັງມີຢູ່ຢ່າງຖ້ວມລົ້ນຈົນວ່າພວກເຂົາໝົດກຳລັງໄປ.	And it came to pass that when Jesus had made an end of praying unto the Father, he arose; but so great was the joy of the multitude that they were overcome.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະເຢຊູໄດ້ກ່າວກັບພວກເຂົາ, ແລະ ບອກໃຫ້ພວກເຂົາລຸກຂຶ້ນ.

And it came to pass that Jesus spake unto them, and bade them arise.

ແລະ ພວກເຂົາໄດ້ລຸກຂຶ້ນຈາກພື້ນດິນ, ແລະ ພຣະອົງໄດ້ກ່າວກັບພວກເຂົາວ່າ: ເຈົ້າເປັນສຸກແລ້ວ ເພາະສັດທາຂອງເຈົ້າ. ແລະ ບັດນີ້ຈົ່ງເບິ່ງ, ຄວາມສຸກຂອງເຮົາເຕັມປ່ຽມ.

And they arose from the earth, and he said unto them: Blessed are ye because of your faith. And now behold, my joy is full.

ແລະ ເມື່ອພຣະອົງໄດ້ກ່າວຂໍ້ຄວາມເຫລົ່ານີ້ແລ້ວ, ພຣະອົງກໍກັນແສງ, ແລະ ຝູງຊົນໄດ້ເປັນພະຍານໃນເລື່ອງນີ້, ແລະ ພຣະອົງໄດ້ເອົາເດັກນ້ອຍໆຂອງພວກເຂົາມາເທື່ອລະຄົນ, ແລະ ອວຍພອນພວກເຂົາ, ແລະ ອະທິຖານຫາພຣະບິດາເພື່ອພວກເຂົາ.

And when he had said these words, he wept, and the multitude bare record of it, and he took their little children, one by one, and blessed them, and prayed unto the Father for them.

ແລະ ເມື່ອພຣະອົງໄດ້ເຮັດສິ່ງນີ້ແລ້ວ, ພຣະອົງກໍກັນແສງອີກ;

And when he had done this he wept again;

ແລະ ພຣະອົງໄດ້ກ່າວກັບຝູງຊົນ, ແລະ ເວົ້າກັບພວກເຂົາວ່າ: ຈົ່ງເບິ່ງລູກນ້ອຍໆຂອງເຈົ້າ.

And he spake unto the multitude, and said unto them: Behold your little ones.

ແລະ ເວລາພວກເຂົາຫລຽວໄປເບິ່ງ ພວກເຂົາໄດ້ກວາດສາຍຕາຂຶ້ນໄປເທິງຟ້າ, ແລະ ພວກເຂົາເຫັນຟ້າສະຫວັນເປີດ, ແລະ ພວກເຂົາໄດ້ເຫັນເຫລົ່າທູດພາກັນລົງມາຈາກສະຫວັນ ຄືກັບວ່າ ຢູ່ທ່າມກາງໄຟ; ແລະ ພວກເພິ່ນໄດ້ລົງມາ ອ້ອມຮອບເດັກນ້ອຍເຫລົ່ານັ້ນໄວ້, ແລະ ພວກເຂົາໄດ້ຖືກປົດລ້ອມໄວ້ດ້ວຍໄຟ; ແລະ ເຫລົ່າທູດໄດ້ປະຕິບັດສາດສະໜາກິດແກ່ພວກເຂົາ.

And as they looked to behold they cast their eyes towards heaven, and they saw the heavens open, and they saw angels descending out of heaven as it were in the midst of fire; and they came down and encircled those little ones about, and they were encircled about with fire; and the angels did minister unto them.

ແລະ ຝູງຊົນໄດ້ເຫັນ ແລະ ໄດ້ຍິນ ແລະ ໄດ້ເປັນພະຍານ; ແລະ ພວກເຂົາຮູ້ວ່າບັນທຶກຂອງພວກເຂົາເປັນຄວາມຈິງ ເພາະພວກເຂົາທຸກຄົນໄດ້ເຫັນ, ແລະ ໄດ້ຍິນດ້ວຍຕົວເອງ; ແລະ ພວກເຂົາມີຈຳນວນຢູ່ປະມານສອງພັນຫ້າຮ້ອຍຄົນ, ລວມທັງຜູ້ຊາຍ, ຜູ້ຍິງ, ແລະ ເດັກນ້ອຍ.

And the multitude did see and hear and bear record; and they know that their record is true for they all of them did see and hear, every man for himself; and they were in number about two thousand and five hundred souls; and they did consist of men, women, and children.

ມ ນີໄຟ ๑๘

๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະເຢຊູໄດ້ສັ່ງໃຫ້ສານຸສິດ ຂອງພຣະອົງໄປເອົາ ເຂົ້າຈີ່ ແລະ ເຫລົ້າອະງຸ່ນຈຳນວນໜຶ່ງມາ ໃຫ້ພຣະອົງ.

๘ ແລະ ໃນຂະນະທີ່ພວກເພິ່ນອອກໄປຫາເຂົ້າຈີ່ ແລະ ເຫລົ້າ ອະງຸ່ນຢູ່ນັ້ນ, ພຣະອົງໄດ້ສັ່ງໃຫ້ຝູງຊົນນັ່ງລົງຢູ່ພື້ນດິນ.

ມ ແລະ ເມື່ອສານຸສິດກັບມາພ້ອມດ້ວຍ ເຂົ້າຈີ່ ແລະ ເຫລົ້າ ອະງຸ່ນ, ພຣະອົງໄດ້ຮັບເອົາເຂົ້າຈີ່ ແລະ ຫັກມັນ ແລະ ໃຫ້ພອນ ແກ່ມັນ; ແລະ ພຣະອົງໄດ້ມອບມັນໃຫ້ແກ່ສານຸສິດ ແລະ ສັ່ງໃຫ້ ພວກເພິ່ນກິນ.

๔ ແລະ ເມື່ອພວກເພິ່ນໄດ້ກິນ ແລະ ອີ່ມແລ້ວ, ພຣະອົງໄດ້ສັ່ງ ໃຫ້ພວກເພິ່ນເອົາໃຫ້ຝູງຊົນກິນ.

๕ ແລະ ເມື່ອຝູງຊົນໄດ້ກິນ ແລະ ອີ່ມແລ້ວ, ພຣະອົງໄດ້ກ່າວກັບ ສານຸສິດວ່າ: ຈົ່ງເບິ່ງ ຈະມີຜູ້ໜຶ່ງໃນບັນດາພວກເຈົ້າ ທີ່ຈະໄດ້ ຮັບການແຕ່ງຕັ້ງ, ແລະ ເຮົາຈະມອບອຳນາດໃຫ້ແກ່ລາວ ເພື່ອ ລາວຈະໄດ້ ຫັກເຂົ້າຈີ່ ແລະ ໃຫ້ພອນແກ່ມັນ ແລະ ເອົາມັນໃຫ້ ແກ່ຜູ້ຄົນຂອງສາດສະໜາຈັກຂອງເຮົາ, ແລະ ໃຫ້ແກ່ທຸກຄົນທີ່ ເຊື່ອ ແລະ ຮັບບັບຕິສະມາໃນນາມຂອງເຮົາ.

๖ ແລະ ສິ່ງນີ້ພວກເຈົ້າຈົ່ງຍຶດຖືປະຕິບັດສະເໝີດັ່ງທີ່ເຮົາໄດ້ ເຮັດ ຊຶ່ງເຮົາໄດ້ຫັກເຂົ້າຈີ່ ແລະ ໃຫ້ພອນແກ່ມັນ ແລະ ເອົາໃຫ້ ເຈົ້າກິນ.

๗ ແລະ ສິ່ງນີ້ເຈົ້າຈົ່ງເຮັດດ້ວຍ ຄວາມລະນຶກເຖິງເນື້ອກາຍຂອງ ເຮົາ, ຊຶ່ງເຮົາໄດ້ສະແດງແກ່ເຈົ້າ. ແລະ ມັນຈະເປັນປະຈັກ ພະຍານຕໍ່ພຣະບິດາວ່າ ເຈົ້າລະນຶກເຖິງເຮົາຢູ່ຕະຫລອດເວລາ. ແລະ ຖ້າຫາກເຈົ້າລະນຶກເຖິງເຮົາຢູ່ຕະຫລອດເວລາ ເຈົ້າຈະມີ ວິນຍານຂອງເຮົາຢູ່ນຳເຈົ້າ.

๘ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພຣະອົງກ່າວຂໍ້ຄວາມ ເຫລົ່ານີ້ແລ້ວ, ພຣະອົງໄດ້ສັ່ງໃຫ້ສານຸສິດຂອງພຣະອົງຮັບເອົາ ຈອກເຫລົ້າອະງຸ່ນ ແລະ ດື່ມມັນ, ແລະ ໃຫ້ພວກເພິ່ນມອບໃຫ້ ແກ່ຝູງຊົນນຳອີກເພື່ອພວກເຂົາຈະໄດ້ດື່ມມັນ.

ລ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເພິ່ນກໍໄດ້ປະຕິບັດ ຕາມນີ້ ແລະ ໄດ້ດື່ມມັນ ແລະ ອີ່ມ; ແລະ ພວກເພິ່ນໄດ້ມອບມັນ ໃຫ້ແກ່ຝູງຊົນ, ແລະ ພວກເຂົາກໍໄດ້ດື່ມ ແລະ ພວກເຂົາອີ່ມ.

๑๐ ແລະ ເມື່ອສານຸສິດໄດ້ກະທຳສິ່ງນີ້ແລ້ວ, ພຣະເຢຊູໄດ້ກ່າວ ກັບພວກເພິ່ນວ່າ: ເຈົ້າເປັນສຸກແລ້ວ ເພາະສິ່ງນີ້ທີ່ເຈົ້າໄດ້ກະທຳ ໄປນັ້ນ, ເພາະນີ້ເປັນການເຮັດໃຫ້ບັນຍັດຂອງເຮົາສຳເລັດ ແລະ ນີ້ເປັນພະຍານຕໍ່ພຣະບິດາວ່າ ເຈົ້າເຕັມໃຈປະຕິບັດຕາມສິ່ງທີ່ ເຮົາໄດ້ບັນຊາເຈົ້າ.

3 Nephi 18

And it came to pass that Jesus commanded his disciples that they should bring forth some bread and wine unto him.

And while they were gone for bread and wine, he commanded the multitude that they should sit themselves down upon the earth.

And when the disciples had come with bread and wine, he took of the bread and brake and blessed it; and he gave unto the disciples and commanded that they should eat.

And when they had eaten and were filled, he commanded that they should give unto the multitude.

And when the multitude had eaten and were filled, he said unto the disciples: Behold there shall one be ordained among you, and to him will I give power that he shall break bread and bless it and give it unto the people of my church, unto all those who shall believe and be baptized in my name.

And this shall ye always observe to do, even as I have done, even as I have broken bread and blessed it and given it unto you.

And this shall ye do in remembrance of my body, which I have shown unto you. And it shall be a testimony unto the Father that ye do always remember me. And if ye do always remember me ye shall have my Spirit to be with you.

And it came to pass that when he said these words, he commanded his disciples that they should take of the wine of the cup and drink of it, and that they should also give unto the multitude that they might drink of it.

And it came to pass that they did so, and did drink of it and were filled; and they gave unto the multitude, and they did drink, and they were filled.

And when the disciples had done this, Jesus said unto them: Blessed are ye for this thing which ye have done, for this is fulfilling my commandments, and this doth witness unto the Father that ye are willing to do that which I have commanded you.

๑๑	ແລະ ນີ້ເຈົ້າຈົ່ງປະຕິບັດສະເໝີໄປກັບຄົນທີ່ກັບໃຈ ແລະ ຮັບບັບຕິສະມາໃນນາມຂອງເຮົາ; ແລະ ເຈົ້າຈົ່ງກະທຳສິ່ງນີ້ດ້ວຍຄວາມລະນຶກເຖິງເລືອດຂອງເຮົາ, ຊຶ່ງເຮົາໄດ້ຫລັ່ງເພື່ອເຈົ້າ, ເພື່ອເຈົ້າຈະໄດ້ເປັນພະຍານຕໍ່ພຣະບິດາວ່າ ເຈົ້າລະນຶກເຖິງເຮົາຢູ່ຕະຫລອດເວລາ. ແລະ ຖ້າຫາກເຈົ້າລະນຶກເຖິງເຮົາຢູ່ຕະຫລອດເວລາ ເຈົ້າຈະມີວິນຍານຂອງເຮົາຢູ່ນຳເຈົ້າ.	And this shall ye always do to those who repent and are baptized in my name; and ye shall do it in remembrance of my blood, which I have shed for you, that ye may witness unto the Father that ye do always remember me. And if ye do always remember me ye shall have my Spirit to be with you.
๑๘	ແລະ ເຮົາໃຫ້ບັນຍັດແກ່ເຈົ້າວ່າ ຈົ່ງກະທຳສິ່ງເຫລົ່ານີ້. ແລະ ຖ້າຫາກເຈົ້າກະທຳຕາມສິ່ງເຫລົ່ານີ້ສະເໝີ ເຈົ້າຍ່ອມເປັນສຸກ, ເພາະເຈົ້າຖືກສ້າງຢູ່ເທິງ ດານຫີນຂອງເຮົາ.	And I give unto you a commandment that ye shall do these things. And if ye shall always do these things blessed are ye, for ye are built upon my rock.
๑๙	ແຕ່ຜູ້ໃດໃນບັນດາພວກເຈົ້າຈະກະທຳຫລາຍ ຫລື ນ້ອຍໄປກວ່ານີ້ຍ່ອມບໍ່ໄດ້ຖືກສ້າງຢູ່ເທິງດານຫີນຂອງເຮົາ; ແຕ່ໄດ້ຖືກສ້າງຢູ່ເທິງດິນຊາຍ; ແລະ ເມື່ອຝົນຖັ່ງເທລົງມາ, ແລະ ນ້ຳກໍນອງ, ແລະ ລົມກຳພັດ, ແລະ ປະທະພວກເຂົາ, ພວກເຂົາຈະພັງ, ແລະ ປະຕູນະລົກຈະເປີດອອກພ້ອມແລ້ວທີ່ຈະຮັບເອົາພວກເຂົາ.	But whoso among you shall do more or less than these are not built upon my rock, but are built upon a sandy foundation; and when the rain descends, and the floods come, and the winds blow, and beat upon them, they shall fall, and the gates of hell are ready open to receive them.
๑๔	ສະນັ້ນ ເຈົ້າຍ່ອມເປັນສຸກ ຖ້າຫາກເຈົ້າຈະຮັກສາບັນຍັດຂອງເຮົາ, ຊຶ່ງພຣະບິດາໄດ້ບັນຊາເຮົາໃຫ້ມອບມັນແກ່ເຈົ້າ.	Therefore blessed are ye if ye shall keep my commandments, which the Father hath commanded me that I should give unto you.
๑๕	ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບເຈົ້າ, ຈົ່ງຄອຍເຝົ້າລະວັງ ແລະ ອະທິຖານຢູ່ສະເໝີ, ເພື່ອເຈົ້າຈະບໍ່ໄດ້ຖືກມານລໍ້ລວງ, ແລະ ຖືກມັນນຳໄປເປັນຊະເລີຍ.	Verily, verily, I say unto you, ye must watch and pray always, lest ye be tempted by the devil, and ye be led away captive by him.
๑๖	ແລະ ເຊັ່ນດຽວກັບທີ່ເຮົາໄດ້ອະທິຖານໃນບັນດາພວກເຈົ້າ, ໃຫ້ເຈົ້າອະທິຖານໃນສາດສະໜາຈັກຂອງເຮົາ ໃນບັນດາຜູ້ຄົນຂອງເຮົາທີ່ກັບໃຈ ແລະ ຮັບບັບຕິສະມາໃນນາມຂອງເຮົາ. ຈົ່ງເບິ່ງ ເຮົາຄື ຄວາມສະຫວ່າງ; ເຮົາໄດ້ເຮັດເປັນ ຕົວຢ່າງໄວ້ໃຫ້ເຈົ້າແລ້ວ.	And as I have prayed among you even so shall ye pray in my church, among my people who do repent and are baptized in my name. Behold I am the light; I have set an example for you.
๑๗	ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພຣະເຢຊູໄດ້ກ່າວຂໍ້ຄວາມເຫລົ່ານີ້ກັບສານຸສິດຂອງພຣະອົງແລ້ວ, ພຣະອົງໄດ້ຫັນໄປຫາຝູງຊົນອີກ ແລະ ກ່າວກັບພວກເຂົາວ່າ:	And it came to pass that when Jesus had spoken these words unto his disciples, he turned again unto the multitude and said unto them:
๑๘	ຈົ່ງເບິ່ງ, ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບເຈົ້າ, ເຈົ້າຕ້ອງຄອຍເຝົ້າລະວັງ ແລະ ອະທິຖານຢູ່ສະເໝີ ເພື່ອເຈົ້າຈະບໍ່ໄດ້ເຂົ້າໄປຫາການລໍ້ລວງ; ເພາະວ່າ ຊາຕານປາດຖະໜາຢາກໄດ້ເຈົ້າ, ເພື່ອມັນຈະໄດ້ຝັດຮ່ອນເຈົ້າເໝືອນດັ່ງຝັດເຂົ້າເປືອກ.	Behold, verily, verily, I say unto you, ye must watch and pray always lest ye enter into temptation; for Satan desireth to have you, that he may sift you as wheat.
๑๙	ສະນັ້ນ ເຈົ້າຕ້ອງອະທິຖານຫາພຣະບິດາຢູ່ສະເໝີໃນນາມຂອງເຮົາ;	Therefore ye must always pray unto the Father in my name;
๘๐	ແລະ ສິ່ງໃດກໍຕາມທີ່ເຈົ້າຈະຂໍຈາກພຣະບິດາໃນນາມຂອງເຮົາຊຶ່ງຖືກຕ້ອງ, ໂດຍເຊື່ອວ່າເຈົ້າຈະໄດ້ຮັບ, ຈົ່ງເບິ່ງ ມັນຈະຖືກມອບໃຫ້ແກ່ເຈົ້າ.	And whatsoever ye shall ask the Father in my name, which is right, believing that ye shall receive, behold it shall be given unto you.
๘๑	ຈົ່ງ ອະທິຖານນຳຄອບຄົວຂອງເຈົ້າຫາພຣະບິດາໃນນາມຂອງເຮົາສະເໝີ, ເພື່ອເມຍຂອງເຈົ້າ ແລະ ລູກຂອງເຈົ້າຈະໄດ້ຮັບພອນ.	Pray in your families unto the Father, always in my name, that your wives and your children may be blessed.

ຂ ແລະ ຈົ່ງເບິ່ງ, ເຈົ້າຈົ່ງຊຸມນຸມກັນຢູ່ເລື້ອຍໆ; ແລະ ເຈົ້າຢ່າໄດ້ຫ້າມຜູ້ທີ່ເຂົ້າມາຫາເຈົ້າເວລາເຈົ້າກຳລັງຊຸມນຸມກັນຢູ່ນັ້ນ, ແຕ່ປ່ອຍໃຫ້ເຂົາເຂົ້າມາຫາເຈົ້າ ແລະ ຢ່າໄດ້ຫ້າມເຂົາ;

And behold, ye shall meet together oft; and ye shall not forbid any man from coming unto you when ye shall meet together, but suffer them that they may come unto you and forbid them not;

ຂ ແຕ່ເຈົ້າຈົ່ງ ອະທິຖານເພື່ອເຂົາ, ແລະ ຢ່າໄດ້ຂັບໄລ່ເຂົາອອກໄປ; ແລະ ຖ້າຫາກເປັນໄປວ່າ ເຂົາມາຫາເຈົ້າເປັນປະຈຳ ຈົ່ງ ອະທິຖານຫາພຣະບິດາເພື່ອເຂົາໃນນາມຂອງເຮົາ.

But ye shall pray for them, and shall not cast them out; and if it so be that they come unto you oft ye shall pray for them unto the Father, in my name.

ຂ ສະນັ້ນ ຈົ່ງຍົກ ຄວາມສະຫວ່າງຂອງເຈົ້າຂຶ້ນເພື່ອມັນຈະສ່ອງແສງໄປທົ່ວໂລກ. ຈົ່ງເບິ່ງ ເຮົາຄື ຄວາມສະຫວ່າງຊຶ່ງເຈົ້າຈະຍົກຂຶ້ນ—ພ້ອມທັງສິ່ງທີ່ເຈົ້າໄດ້ເຫັນເຮົາກະທຳໄປນັ້ນ. ຈົ່ງເບິ່ງ ເຈົ້າເຫັນວ່າເຮົາໄດ້ອະທິຖານຫາພຣະບິດາ, ແລະ ເຈົ້າທຸກຄົນໄດ້ເຫັນດ້ວຍຕາຂອງຕົນເອງ.

Therefore, hold up your light that it may shine unto the world. Behold I am the light which ye shall hold up—that which ye have seen me do. Behold ye see that I have prayed unto the Father, and ye all have witnessed.

ຂ ແລະ ເຈົ້າເຫັນວ່າ ເຮົາບໍ່ໄດ້ສັ່ງໃຫ້ ຜູ້ໃດໃນພວກເຈົ້າອອກໄປ, ແຕ່ໄດ້ສັ່ງໃຫ້ເຈົ້າເຂົ້າມາຫາເຮົາ, ເພື່ອເຈົ້າຈະໄດ້ ສຳຜັດ ແລະ ເຫັນ; ເຖິງແມ່ນເຊັ່ນນັ້ນເຈົ້າຈົ່ງປະຕິບັດຕໍ່ໂລກ; ແລະ ຜູ້ໃດ ກໍຕາມທີ່ຝ່າຝືນບັນຍັດນີ້ ຜູ້ນັ້ນຈະຍອມໃຫ້ຕົນຖືກຊັກນຳໄປ ຫາການລໍ້ລວງ.

And ye see that I have commanded that none of you should go away, but rather have commanded that ye should come unto me, that ye might feel and see; even so shall ye do unto the world; and whosoever breaketh this commandment suffereth himself to be led into temptation.

ຂ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອພຣະເຢຊູໄດ້ກ່າວ ຂໍ້ຄວາມເຫລົ່ານີ້ແລ້ວ, ພຣະອົງໄດ້ຫອດພຣະເນດໄປຫາສານຸ ສິດທີ່ພຣະອົງເລືອກໄວ້ນັ້ນອີກ, ແລະ ກ່າວກັບພວກເພິ່ນວ່າ:

And now it came to pass that when Jesus had spoken these words, he turned his eyes again upon the disciples whom he had chosen, and said unto them:

ຂ ຈົ່ງເບິ່ງ ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບເຈົ້າ, ເຮົາຈະ ມອບບັນຍັດອີກຂໍ້ໜຶ່ງໃຫ້ແກ່ເຈົ້າ, ແລະ ຫລັງຈາກນັ້ນເຮົາຕ້ອງ ໄປເຝົ້າ ພຣະບິດາຂອງເຮົາ ເພື່ອຈະໄດ້ກະທຳໃຫ້ພຣະບັນຍັດຂໍ້ ອື່ນໆທີ່ພຣະອົງໄດ້ປະທານໃຫ້ແກ່ເຮົາສຳເລັດ.

Behold verily, verily, I say unto you, I give unto you another commandment, and then I must go unto my Father that I may fulfil other commandments which he hath given me.

ຂ ແລະ ບັດນີ້ຈົ່ງເບິ່ງ, ນີ້ຄືບັນຍັດທີ່ເຮົາຈະມອບໃຫ້ແກ່ເຈົ້າ, ຄື ເວລາເຈົ້າປະຕິບັດສາດສະໜາກິດນັ້ນ ຢ່າປ່ອຍໃຫ້ຜູ້ໃດ ຮັບ ສ່ວນເນື້ອໜັງ ແລະ ໂລຫິດຂອງເຮົາໂດຍ ບໍ່ມີຄ່າຄວນ;

And now behold, this is the commandment which I give unto you, that ye shall not suffer any one knowingly to partake of my flesh and blood unworthily, when ye shall minister it;

ຂ ເພາະວ່າຜູ້ໃດກໍຕາມທີ່ກິນເນື້ອໜັງ ແລະ ດື່ມ ໂລຫິດຂອງ ເຮົາໂດຍ ບໍ່ມີຄ່າຄວນ ຜູ້ນັ້ນຍ່ອມກິນ ແລະ ດື່ມຄວາມອັບ ປະໂຫຍດເຂົ້າໄປສູ່ດວງວິນຍານຂອງເຂົາ; ສະນັ້ນ ຖ້າຫາກເຈົ້າ ຮູ້ວ່າຜູ້ໃດບໍ່ມີຄ່າຄວນທີ່ຈະກິນເນື້ອໜັງ ແລະ ດື່ມໂລຫິດຂອງ ເຮົາ ເຈົ້າຄວນຫ້າມເຂົາໄວ້.

For whoso eateth and drinketh my flesh and blood unworthily eateth and drinketh damnation to his soul; therefore if ye know that a man is unworthy to eat and drink of my flesh and blood ye shall forbid him.

ຂ ເຖິງຢ່າງໃດກໍຕາມ, ເຈົ້າຢ່າໄດ້ ຂັບໄລ່ເຂົາອອກຈາກບັນດາ ພວກເຈົ້າ, ແຕ່ເຈົ້າຈົ່ງປະຕິບັດສາດສະໜາກິດແກ່ເຂົາ ແລະ ຈົ່ງ ອະທິຖານຫາພຣະບິດາໃນນາມຂອງເຮົາເພື່ອເຂົາ ແລະ ຖ້າ ຫາກເປັນໄປວ່າ ເຂົາກັບໃຈ ແລະ ຮັບບັບຕິສະມາໃນນາມຂອງ ເຮົາ, ເມື່ອນັ້ນເຈົ້າຈົ່ງຮັບເອົາເຂົາໄວ້, ແລະ ຈົ່ງມອບເນື້ອໜັງ ແລະ ໂລຫິດຂອງເຮົາໃຫ້ເຂົາ.

Nevertheless, ye shall not cast him out from among you, but ye shall minister unto him and shall pray for him unto the Father, in my name; and if it so be that he repenteth and is baptized in my name, then shall ye receive him, and shall minister unto him of my flesh and blood.

ມ١ ແຕ່ຖ້າຫາກເຂົາບໍ່ກັບໃຈ ເຂົາຈະບໍ່ຖືກນັບເຂົ້າຢູ່ໃນບັນດາ ຜູ້ຄົນຂອງເຮົາ, ເພື່ອວ່າເຂົາຈະບໍ່ໄດ້ທຳລາຍຜູ້ຄົນຂອງເຮົາ, ເພາະຈົ່ງເບິ່ງ ເຮົາຮູ້ຈັກແກະ ຂອງເຮົາ, ແລະ ພວກເຂົາຖືກນັບ ໄວ້ແລ້ວ.

But if he repent not he shall not be numbered among my people, that he may not destroy my people, for behold I know my sheep, and they are numbered.

ມ١ ເຖິງຢ່າງໃດກໍຕາມ, ເຈົ້າຈະບໍ່ຂັບໄລ່ເຂົາອອກ ຈາກທຳມະ ສາລາຂອງພວກເຈົ້າ, ຫລື ຈາກສະຖານທີ່ນະມັດສະການຂອງ ພວກເຈົ້າ, ແຕ່ຈົ່ງປະຕິບັດສາດສະໜາກິດແກ່ຄົນນັ້ນສະເໝີໄປ ເພາະເຈົ້າບໍ່ສາມາດຈະຮູ້ໄດ້ວ່າ ເຂົາອາດຈະກັບມາ ແລະ ກັບໃຈ ຫລືບໍ່, ແລະ ມາຫາເຮົາດ້ວຍຈຸດປະສົງເຕັມທີ່ແຫ່ງໃຈ, ແລະ ເຮົາຈະ ປິ່ນປົວເຂົາ; ແລະ ເຈົ້າຈະເປັນທາງນຳຄວາມລອດມາສູ່ ເຂົາ.

Nevertheless, ye shall not cast him out of your synagogues, or your places of worship, for unto such shall ye continue to minister; for ye know not but what they will return and repent, and come unto me with full purpose of heart, and I shall heal them; and ye shall be the means of bringing salvation unto them.

ມ١١ ສະນັ້ນ, ຈົ່ງຮັກສາຂໍ້ຄວາມເຫລົ່ານີ້ ຊຶ່ງເຮົາໄດ້ບັນຊາເຈົ້າ ເພື່ອ ເຈົ້າຈະບໍ່ໄດ້ເຂົ້າຢູ່ພາຍໃຕ້ ການກ່າວໂທດ; ເພາະວິບັດແກ່ຜູ້ທີ່ ຖືກພຣະບິດາກ່າວໂທດ.

Therefore, keep these sayings which I have commanded you that ye come not under condemnation; for wo unto him whom the Father condemneth.

ມ١٤ ແລະ ເຮົາໄດ້ມອບບັນຍັດເຫລົ່ານີ້ໃຫ້ແກ່ເຈົ້າຍ້ອນວ່າ ການ ໂຕ້ຖຽງກັນ ຊຶ່ງເຄີຍມີມາກ່ອນໃນບັນດາພວກເຈົ້າ. ແລະ ເຈົ້າ ຍ່ອມເປັນສຸກ ຖ້າຫາກເຈົ້າ ບໍ່ມີການໂຕ້ຖຽງກັນໃນບັນດາພວກ ເຈົ້າເອງ.

And I give you these commandments because of the disputations which have been among you. And blessed are ye if ye have no disputations among you.

ມ١٥ ແລະ ບັດນີ້ເຮົາຈະໄປເຝົ້າພຣະບິດາ, ເພາະມັນສົມຄວນທີ່ ເຮົາຈະໄປເຝົ້າພຣະບິດາ ເພື່ອເຈົ້າ.

And now I go unto the Father, because it is expedient that I should go unto the Father for your sakes.

ມ١٦ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພຣະເຢຊູຈົບຂໍ້ຄວາມ ເຫລົ່ານີ້ແລ້ວ, ພຣະອົງໄດ້ເອົາ ພຣະຫັດແຕະຕ້ອງ ສານຸສິດ ແຕ່ລະຄົນຜູ້ທີ່ພຣະອົງເລືອກໄວ້ ຈົນໄດ້ແຕະຕ້ອງທຸກຄົນ, ແລະ ກ່າວກັບພວກເພີ່ນໃນຂະນະທີ່ແຕະຕ້ອງພວກເພີ່ນຢູ່ນັ້ນ.

And it came to pass that when Jesus had made an end of these sayings, he touched with his hand the disciples whom he had chosen, one by one, even until he had touched them all, and spake unto them as he touched them.

ມ١٧ ແລະ ຝູງຊົນບໍ່ໄດ້ຍິນພຣະຄຳທີ່ພຣະອົງກ່າວ, ສະນັ້ນພວກ ເຂົາຈຶ່ງບໍ່ໄດ້ເປັນພະຍານ; ແຕ່ສານຸສິດໄດ້ເປັນພະຍານວ່າ ພຣະອົງໄດ້ປະທານ ອຳນາດໃຫ້ພວກເພີ່ນ ເພື່ອຈະໄດ້ມອບ ພຣະວິນຍານບໍລິສຸດໃຫ້ແກ່ຄົນອື່ນໆ. ແລະ ຕໍ່ໄປນີ້ຂ້າພະເຈົ້າຈະ ສະແດງໃຫ້ພວກທ່ານຮູ້ວ່າ ບັນທຶກນີ້ເປັນຄວາມຈິງ.

And the multitude heard not the words which he spake, therefore they did not bear record; but the disciples bare record that he gave them power to give the Holy Ghost. And I will show unto you hereafter that this record is true.

ມ١٨ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພຣະເຢຊູໄດ້ແຕະຕ້ອງ ໝົດທຸກຄົນແລ້ວ, ມັນໄດ້ມີ ກ້ອນເມກມາປົກຄຸມຝູງຊົນໄວ້ເຖິງ ຂະໜາດບໍ່ມີຜູ້ໃດສາມາດຫລຽວເຫັນພຣະເຢຊູໄດ້.

And it came to pass that when Jesus had touched them all, there came a cloud and overshadowed the multitude that they could not see Jesus.

ມ١٩ ແລະ ໃນຂະນະທີ່ພວກເຂົາຖືກກ້ອນເມກປົກຄຸມຢູ່ນັ້ນ ພຣະອົງໄດ້ຈາກພວກເຂົາໄປ, ແລະ ໄດ້ສະເດັດຂຶ້ນສະຫວັນ. ແລະ ພວກສານຸສິດໄດ້ເຫັນ ແລະ ໄດ້ເປັນພະຍານວ່າ ພຣະອົງ ໄດ້ສະເດັດຂຶ້ນສະຫວັນອີກເທື່ອໜຶ່ງ.

And while they were overshadowed he departed from them, and ascended into heaven. And the disciples saw and did bear record that he ascended again into heaven.

ມ ນີໄຟ ๑ณ

๑ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ເມື່ອພຣະເຢຊູໄດ້ສະເດັດ
ຂຶ້ນສູ່ສະຫວັນແລ້ວ, ຝູງຊົນກໍໄດ້ແຍກຍ້າຍກັນໄປ, ແລະ ທຸກ
ຄົນກໍໄດ້ພາເມຍຂອງຕົນ ແລະ ລູກຂອງຕົນກັບໄປບ້ານເຮືອນ
ຂອງໃຜລາວ.

๒ ແລະ ມັນໄດ້ມີຂ່າວລືໂດຍທັນທີໄປທົ່ວໃນບັນດາຜູ້ຄົນກ່ອນ
ມັນຈະຄ່ຳມືດ, ວ່າພຣະອົງໄດ້ປະຕິບັດສາດສະໜາກົດແກ່ພວກ
ເຂົາ, ແລະ ວ່າພຣະອົງຈະມາປະກົດຕໍ່ຝູງຊົນອີກໃນມື້ອື່ນ.

๓ ແທ້ຈິງແລ້ວ, ແລະ ຕະຫລອດທັງຄືນມັນໄດ້ມີສຽງເວົ້າກັນໄປ
ທົ່ວກ່ຽວກັບພຣະເຢຊູ; ແລະ ພວກເຂົາໄດ້ສົ່ງຂ່າວໄປຍັງຜູ້ຄົນ
ຈົນວ່າຄົນຢ່າງຫລວງຫລາຍໄດ້ຮູ້ຈັກ, ແທ້ຈິງແລ້ວ, ຄົນເປັນ
ຈຳນວນຫລວງຫລາຍໄດ້ທຳງານຢ່າງໜັກຕະຫລອດທັງຄືນ,
ເພື່ອວ່າໃນມື້ຕໍ່ມາ ພວກເຂົາຈະໄດ້ມີໜ້າຢູ່ບ່ອນທີ່ພຣະເຢຊູຈະ
ມາປະກົດຕົວຕໍ່ຝູງຊົນອີກ.

๔ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນມື້ຕໍ່ມາ ຝູງຊົນກໍໄດ້ມາ
ລວມກັນຢູ່ແລ້ວ, ຈົ່ງເບິ່ງ, ນີໄຟ ແລະ ນ້ອງຊາຍຂອງເພິ່ນ ຜູ້ທີ່
ເພິ່ນໄດ້ໂຜດຍົກຂຶ້ນຈາກຕາຍ ຊື່ວ່າ ຕິໂມທີ, ແລະ ລູກຊາຍຂອງ
ເພິ່ນຊື່ວ່າໂຢນາ, ແລະ ມາໂທໄນກັບນ້ອງຊາຍຂອງເພິ່ນຊື່ວ່າ ມາ
�โทไนธา, ແລະ ຄູເມັນ, ແລະ ຄູເມັນອອນໄຮ, ແລະ ເຢເຣມີຢາ,
ແລະ ເຊັມນັນ, ແລະ ໂຢນາ, ແລະ ເຊເດກີຢາ, ແລະ ເອຊາຢາ—
ທັງໝົດນີ້ຄືຊື່ຂອງ ສານຸສິດທີ່ພຣະເຢຊູໄດ້ເລືອກໄວ້—ແລະ
ເຫດການໄດ້ບັງເກີດຂຶ້ນຄື ພວກເພິ່ນໄດ້ອອກໄປຢືນຢູ່ເຄິ່ງກາງ
ຝູງຊົນ.

๕ ແລະ ຈົ່ງເບິ່ງ, ມັນມີຝູງຊົນຢ່າງຫລວງຫລາຍຈົນວ່າພວກ
ເພິ່ນຕ້ອງໄດ້ໃຫ້ພວກເຂົາແຍກອອກເປັນສິບສອງກຸ່ມ.

๖ ແລະ ສານຸສິດສິບສອງຄົນໄດ້ສິດສອນຝູງຊົນ; ແລະ ຈົ່ງເບິ່ງ,
ພວກເພິ່ນໄດ້ໃຫ້ຝູງຊົນຄຸເຂົ່າລົງຢູ່ກັບພື້ນດິນ ແລະ ອະທິຖານ
ຫາພຣະບິດາໃນພຣະນາມຂອງພຣະເຢຊູ.

๗ ແລະ ສານຸສິດກໍໄດ້ອະທິຖານຫາພຣະບິດາໃນພຣະນາມ
ຂອງພຣະເຢຊູຄືກັນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກ
ເພິ່ນໄດ້ລຸກຂຶ້ນ ແລະ ປະຕິບັດສາດສະໜາກົດແກ່ຜູ້ຄົນ.

๘ ແລະ ເມື່ອພວກເພິ່ນໄດ້ສິດສອນຂໍ້ຄວາມດຽວກັນກັບທີ່
ພຣະເຢຊູໄດ້ກ່າວ ໂດຍບໍ່ຜິດຈາກພຣະຄຳທີ່ພຣະເຢຊູໄດ້ກ່າວ
ໄວ້ເລີຍ ຈົ່ງເບິ່ງ, ພວກເພິ່ນໄດ້ຄຸເຂົ່າລົງ ແລະ ອະທິຖານຫາ
ພຣະບິດາໃນພຣະນາມຂອງພຣະເຢຊູ.

3 Nephi 19

And now it came to pass that when Jesus had ascended into heaven, the multitude did disperse, and every man did take his wife and his children and did return to his own home.

And it was noised abroad among the people immediately, before it was yet dark, that the multitude had seen Jesus, and that he had ministered unto them, and that he would also show himself on the morrow unto the multitude.

Yea, and even all the night it was noised abroad concerning Jesus; and insomuch did they send forth unto the people that there were many, yea, an exceedingly great number, did labor exceedingly all that night, that they might be on the morrow in the place where Jesus should show himself unto the multitude.

And it came to pass that on the morrow, when the multitude was gathered together, behold, Nephi and his brother whom he had raised from the dead, whose name was Timothy, and also his son, whose name was Jonas, and also Mathoni, and Mathonihah, his brother, and Kumen, and Kumenonhi, and Jeremiah, and Shemnon, and Jonas, and Zedekiah, and Isaiah—now these were the names of the disciples whom Jesus had chosen—and it came to pass that they went forth and stood in the midst of the multitude.

And behold, the multitude was so great that they did cause that they should be separated into twelve bodies.

And the twelve did teach the multitude; and behold, they did cause that the multitude should kneel down upon the face of the earth, and should pray unto the Father in the name of Jesus.

And the disciples did pray unto the Father also in the name of Jesus. And it came to pass that they arose and ministered unto the people.

And when they had ministered those same words which Jesus had spoken—nothing varying from the words which Jesus had spoken—behold, they knelt again and prayed to the Father in the name of Jesus.

ຈ ແລະ ພວກເພີ່ນໄດ້ອະທິຖານຂໍສິ່ງທີ່ພວກເພີ່ນປາດຖະໜາ ຫລາຍທີ່ສຸດ; ແລະ ພວກເພີ່ນປາດຖະໜາຂໍໃຫ້ ພຣະວິນຍານ ບໍລິສຸດມາສະຖິດຢູ່ນຳພວກເພີ່ນ.

And they did pray for that which they most desired; and they desired that the Holy Ghost should be given unto them.

ຊ ແລະ ເມື່ອພວກເພີ່ນອະທິຖານແລ້ວ ພວກເພີ່ນຈຶ່ງໄດ້ລົງໄປ ຍັງແຄມແມ່ນ້ຳ, ແລະ ຝູງຊົນໄດ້ຕິດຕາມພວກເພີ່ນໄປ.

And when they had thus prayed they went down unto the water's edge, and the multitude followed them.

ຊທ ແລະ ເຫດການໄດ້ບັງເກີດຂຶ້ນຄື ນີໄຟໄດ້ລົງໄປ ໃນນ້ຳ ແລະ ຮັບບັບຕິສະມາ.

And it came to pass that Nephi went down into the water and was baptized.

ຊດ ແລະ ເພີ່ນໄດ້ຂຶ້ນມາຈາກນ້ຳ ແລະ ເລີ່ມໃຫ້ບັບຕິສະມາ. ແລະ ເພີ່ນໄດ້ໃຫ້ບັບຕິສະມາທຸກຄົນທີ່ພຣະເຢຊູໄດ້ເລືອກໄວ້.

And he came up out of the water and began to baptize. And he baptized all those whom Jesus had chosen.

ຊນ ແລະ ເຫດການໄດ້ບັງເກີດຂຶ້ນເມື່ອພວກເພີ່ນທຸກຄົນໄດ້ຮັບ ບັບຕິສະມາ ແລະ ຂຶ້ນມາຈາກນ້ຳແລ້ວ, ພຣະວິນຍານບໍລິສຸດໄດ້ ສະເດັດລົງມາເທິງພວກເພີ່ນ, ແລະ ພວກເພີ່ນໄດ້ເຕັມໄປດ້ວຍ ພຣະວິນຍານບໍລິສຸດ ແລະ ດ້ວຍໄຟ.

And it came to pass when they were all baptized and had come up out of the water, the Holy Ghost did fall upon them, and they were filled with the Holy Ghost and with fire.

ຊຕ ແລະ ຈົ່ງເບິ່ງ, ຄືກັນກັບວ່າພວກເພີ່ນຖືກ ລ້ອມໄວ້ດ້ວຍໄຟ; ແລະ ມັນໄດ້ລົງມາຈາກສະຫວັນ, ແລະ ຝູງຊົນໄດ້ເຫັນກັບຕາ ຂອງຕົນເອງ, ແລະ ໄດ້ເປັນພະຍານເຖິງເລື່ອງນີ້ ແລະ ເຫລົ່າ ທູດໄດ້ລົງມາຈາກສະຫວັນ ແລະ ໄດ້ປະຕິບັດສາດສະໜາກິດ ແກ່ພວກເພີ່ນ.

And behold, they were encircled about as if it were by fire; and it came down from heaven, and the multitude did witness it, and did bear record; and angels did come down out of heaven and did minister unto them.

ຊຖ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນຂະນະທີ່ເຫລົ່າທູດກຳລັງ ປະຕິບັດສາດສະໜາກິດແກ່ສານຸສິດຢູ່ນັ້ນ, ຈົ່ງເບິ່ງ, ພຣະເຢຊູ ໄດ້ສະເດັດລົງມາ ແລະ ປະທັບຢືນຢູ່ເຄິ່ງກາງ ແລະ ປະຕິບັດ ສາດສະໜາກິດແກ່ພວກເພີ່ນ.

And it came to pass that while the angels were ministering unto the disciples, behold, Jesus came and stood in the midst and ministered unto them.

ຊທ ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະອົງໄດ້ກ່າວກັບຝູງຊົນ, ແລະ ບັນຊາໃຫ້ພວກເຂົາຄຸເຂົ່າລົງຢູ່ກັບພື້ນດິນອີກ, ແລະ ບັນຊາໃຫ້ສານຸສິດຂອງພຣະອົງຄຸເຂົ່າລົງຢູ່ກັບພື້ນດິນຄືກັນ.

And it came to pass that he spake unto the multitude, and commanded them that they should kneel down again upon the earth, and also that his disciples should kneel down upon the earth.

ຊນ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອທຸກຄົນໄດ້ຄຸເຂົ່າລົງຢູ່ ກັບພື້ນດິນແລ້ວ ພຣະອົງໄດ້ບັນຊາໃຫ້ສານຸສິດຂອງພຣະອົງ ອະທິຖານ.

And it came to pass that when they had all knelt down upon the earth, he commanded his disciples that they should pray.

ຊຕ ແລະ ຈົ່ງເບິ່ງ, ພວກເພີ່ນເລີ່ມອະທິຖານ; ແລະ ພວກເພີ່ນໄດ້ ອະທິຖານຫາພຣະເຢຊູ, ເອີ້ນພຣະອົງວ່າພຣະຜູ້ເປັນເຈົ້າ ແລະ ພຣະເຈົ້າຂອງພວກເພີ່ນ.

And behold, they began to pray; and they did pray unto Jesus, calling him their Lord and their God.

ຊຖ ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະເຢຊູໄດ້ສະເດັດອອກໄປ ຈາກວົງລ້ອມຂອງພວກເພີ່ນ ແລະ ໄດ້ສະເດັດອອກໄປ ຫ່າງຈາກພວກເພີ່ນເລັກໜ້ອຍ ແລະ ກົ້ມຂາບລົງຢູ່ກັບພື້ນ ດິນ, ແລະ ພຣະອົງໄດ້ກ່າວວ່າ:

And it came to pass that Jesus departed out of the midst of them, and went a little way off from them and bowed himself to the earth, and he said:

๘๐ ພຣະບິດາເອີຍ, ຂ້ານ້ອຍຂໍຂອບພຣະໄທທີ່ພຣະອົງໄດ້ປະທານພຣະວິນຍານບໍລິສຸດໃຫ້ແກ່ຄົນເຫລົ່ານີ້ ຊຶ່ງຂ້ານ້ອຍເລືອກໄວ້; ແລະ ເປັນຍ້ອນສັດທາຂອງພວກເຂົາທີ່ມີໃນຂ້ານ້ອຍ, ຂ້ານ້ອຍຈຶ່ງໄດ້ເລືອກພວກເຂົາຈາກໂລກ.

Father, I thank thee that thou hast given the Holy Ghost unto these whom I have chosen; and it is because of their belief in me that I have chosen them out of the world.

๘๑ ພຣະບິດາເອີຍ, ຂ້ານ້ອຍຂໍວິງວອນຂໍພຣະອົງປະທານພຣະວິນຍານບໍລິສຸດໃຫ້ແກ່ທຸກຄົນທີ່ຈະເຊື່ອໃນຄຳເວົ້າຂອງພວກເຂົາ.

Father, I pray thee that thou wilt give the Holy Ghost unto all them that shall believe in their words.

๘๒ ພຣະບິດາເອີຍ, ພຣະອົງໄດ້ປະທານພຣະວິນຍານບໍລິສຸດໃຫ້ແກ່ພວກເຂົາ ເພາະພວກເຂົາເຊື່ອໃນຂ້ານ້ອຍ; ແລະ ພຣະອົງເຫັນວ່າ ພວກເຂົາເຊື່ອໃນຂ້ານ້ອຍກໍເພາະວ່າພຣະອົງໄດ້ຍິນພວກເຂົາ, ແລະ ພວກເຂົາອະທິຖານຫາຂ້ານ້ອຍ; ແລະ ພວກເຂົາອະທິຖານຫາຂ້ານ້ອຍເພາະຂ້ານ້ອຍຢູ່ກັບພວກເຂົາ.

Father, thou hast given them the Holy Ghost because they believe in me; and thou seest that they believe in me because thou hearest them, and they pray unto me; and they pray unto me because I am with them.

๘๓ ແລະ ບັດນີ້ພຣະບິດາເອີຍ, ຂ້ານ້ອຍອະທິຖານຫາພຣະອົງເພື່ອພວກເຂົາ, ແລະ ເພື່ອທຸກຄົນທີ່ຈະເຊື່ອໃນຄຳເວົ້າຂອງພວກເຂົາ, ເພື່ອພວກເຂົາຈະໄດ້ເຊື່ອໃນຂ້ານ້ອຍ, ເພື່ອຂ້ານ້ອຍຈະໄດ້ຢູ່ໃນພວກເຂົາ ດັ່ງພຣະອົງຢູ່ໃນຂ້ານ້ອຍ, ເພື່ອພວກເຮົາຈະໄດ້ເປັນ ໜຶ່ງ.

And now Father, I pray unto thee for them, and also for all those who shall believe on their words, that they may believe in me, that I may be in them as thou, Father, art in me, that we may be one.

๘๔ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພຣະເຢຊູໄດ້ອະທິຖານຫາພຣະບິດາດັ່ງນັ້ນແລ້ວ, ພຣະອົງໄດ້ສະເດັດໄປຫາສານຸສິດຂອງພຣະອົງ, ແລະ ຈົ່ງເບິ່ງ, ພວກເພີ່ນຍັງອະທິຖານຫາພຣະອົງຢູ່ໂດຍບໍ່ຢຸດຢັ້ງ; ແລະ ພວກເພີ່ນບໍ່ໄດ້ ເວົ້າຊ້ຳຄຳເກົ່າ, ເພາະວ່າພວກເພີ່ນໄດ້ຮັບມາແລ້ວວ່າພວກເພີ່ນຄວນອະທິຖານແບບໃດ, ແລະ ພວກເພີ່ນກໍເຕັມໄປດ້ວຍຄວາມປາດຖະໜາ.

And it came to pass that when Jesus had thus prayed unto the Father, he came unto his disciples, and behold, they did still continue, without ceasing, to pray unto him; and they did not multiply many words, for it was given unto them what they should pray, and they were filled with desire.

๘๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະເຢຊູໄດ້ປະທານພອນໃຫ້ແກ່ພວກເພີ່ນໃນຂະນະທີ່ພວກເພີ່ນກຳລັງອະທິຖານຫາພຣະອົງຢູ່ນັ້ນ, ແລະ ພຣະອົງໄດ້ຍິ້ມໃສ່ພວກເພີ່ນ, ແລະ ຄວາມສະຫວ່າງໃນ ພຣະພັກຂອງພຣະອົງໄດ້ສ່ອງໃສ່ພວກເພີ່ນ, ແລະ ຈົ່ງເບິ່ງ ພວກເພີ່ນ ຂາວຄືກັນກັບພຣະພັກ ແລະ ອາພອນຂອງພຣະເຢຊູ; ແລະ ຈົ່ງເບິ່ງ ຄວາມຂາວນັ້ນຍິ່ງກວ່າຄວາມຂາວທັງປວງ, ແທ້ຈິງແລ້ວ, ບໍ່ມີສິ່ງໃດໃນແຜ່ນດິນໂລກທີ່ຈະຂາວເທົ່າກັບຄວາມຂາວນັ້ນ.

And it came to pass that Jesus blessed them as they did pray unto him; and his countenance did smile upon them, and the light of his countenance did shine upon them, and behold they were as white as the countenance and also the garments of Jesus; and behold the whiteness thereof did exceed all the whiteness, yea, even there could be nothing upon earth so white as the whiteness thereof.

๘๖ ແລະ ພຣະເຢຊູໄດ້ກ່າວກັບພວກເພີ່ນວ່າ: ຈົ່ງອະທິຖານຕໍ່ໄປເຖີດ; ແຕ່ເຖິງປານນັ້ນພວກເພີ່ນກໍບໍ່ໄດ້ຢຸດອະທິຖານເລີຍ.

And Jesus said unto them: Pray on; nevertheless they did not cease to pray.

๘๗ ແລະ ພຣະອົງໄດ້ຫັນໄປຈາກພວກເພີ່ນອີກ, ແລະ ໄດ້ສະເດັດອອກໄປຫ່າງຈາກພວກເພີ່ນເລັກໜ້ອຍ; ແລະ ກົ້ມຂາບລົງຢູ່ກັບພື້ນດິນ; ແລະ ພຣະອົງໄດ້ອະທິຖານຫາພຣະບິດາອີກ, ມີຄວາມວ່າ:

And he turned from them again, and went a little way off and bowed himself to the earth; and he prayed again unto the Father, saying:

๘๒	ພຣະບິດາເອີຍ, ຂ້ານ້ອຍຂໍຂອບພຣະໄทพຣະອົງທີ່ພຣະອົງກະທຳໃຫ້ຜູ້ຄົນທີ່ຂ້ານ້ອຍເລືອກໄວ້ ບໍລິສຸດ, ເພາະສັດທາຂອງພວກເຂົາ, ແລະ ຂ້ານ້ອຍອະທິຖານເພື່ອພວກເຂົາ, ແລະ ເພື່ອທຸກຄົນທີ່ເຊື່ອຄຳຂອງພວກເຂົານຳອີກ, ເພື່ອພວກເຂົາຈະຖືກເຮັດໃຫ້ບໍລິສຸດໃນຂ້ານ້ອຍ, ໂດຍທາງສັດທາໃນຄຳຂອງພວກເຂົາ, ເຖິງຂະໜາດທີ່ພວກເຂົາບໍລິສຸດໃນຂ້ານ້ອຍ.	Father, I thank thee that thou hast purified those whom I have chosen, because of their faith, and I pray for them, and also for them who shall believe on their words, that they may be purified in me, through faith on their words, even as they are purified in me.
๘๓	ພຣະບິດາເອີຍ, ຂ້ານ້ອຍບໍ່ໄດ້ອະທິຖານເພື່ອໂລກ, ແຕ່ເພື່ອຄົນເຫລົ່ານັ້ນທີ່ພຣະອົງໄດ້ປະທານໃຫ້ແກ່ຂ້ານ້ອຍ ຈາກໂລກ ເພາະສັດທາຂອງພວກເຂົາ, ເພື່ອພວກເຂົາຈະຖືກເຮັດໃຫ້ບໍລິສຸດໃນຂ້ານ້ອຍ, ເພື່ອຂ້ານ້ອຍຈະໄດ້ຢູ່ໃນພວກເຂົາຄືກັນກັບພຣະບິດາຢູ່ໃນຂ້ານ້ອຍ, ເພື່ອພວກເຮົາຈະໄດ້ເປັນໜຶ່ງ, ເພື່ອຂ້ານ້ອຍຈະໄດ້ຮັບບາລະມີໃນພວກເຂົາ.	Father, I pray not for the world, but for those whom thou hast given me out of the world, because of their faith, that they may be purified in me, that I may be in them as thou, Father, art in me, that we may be one, that I may be glorified in them.
๘๔	ແລະ ເມື່ອພຣະເຢຊູໄດ້ກ່າວຂໍ້ຄວາມເຫລົ່ານີ້ແລ້ວ ພຣະອົງໄດ້ສະເດັດມາຫາສານຸສິດຂອງພຣະອົງອີກ; ແລະ ຈົ່ງເບິ່ງ ພວກເພິ່ນຍັງອະທິຖານຫາພຣະອົງຢູ່ຢ່າງຕັ້ງອົກຕັ້ງໃຈໂດຍບໍ່ຢຸດຢັ້ງ; ແລະ ພຣະອົງໄດ້ຍິ້ມໃສ່ພວກເພິ່ນອີກ; ແລະ ຈົ່ງເບິ່ງ ພວກເພິ່ນ ຂາວເໝືອນດັ່ງພຣະເຢຊູ.	And when Jesus had spoken these words he came again unto his disciples; and behold they did pray steadfastly, without ceasing, unto him; and he did smile upon them again; and behold they were white, even as Jesus.
๘๕	ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະອົງໄດ້ສະເດັດອອກໄປຫ່າງຈາກພວກເພິ່ນເລັກໜ້ອຍອີກ ແລະ ໄດ້ອະທິຖານຫາພຣະບິດາ;	And it came to pass that he went again a little way off and prayed unto the Father;
๘๖	ແລະ ລີ້ນບໍ່ສາມາດກ່າວພຣະຄຳທີ່ພຣະອົງອະທິຖານນັ້ນໄດ້, ທັງມະນຸດບໍ່ສາມາດ ຂຽນຂໍ້ຄວາມທີ່ພຣະອົງອະທິຖານນັ້ນໄດ້.	And tongue cannot speak the words which he prayed, neither can be written by man the words which he prayed.
๘๗	ແລະ ຝູງຊົນໄດ້ຍິນ ແລະ ໄດ້ເປັນພະຍານ; ແລະ ໃຈຂອງພວກເຂົາເປີດອອກ ແລະ ພວກເຂົາເຂົ້າໃຈສິ່ງທີ່ພຣະອົງໄດ້ອະທິຖານໃນໃຈຂອງພວກເຂົາ.	And the multitude did hear and do bear record; and their hearts were open and they did understand in their hearts the words which he prayed.
๘๘	ເຖິງຢ່າງໃດກໍຕາມ, ພຣະຄຳຊຶ່ງພຣະອົງໄດ້ກ່າວອອກມານັ້ນ ຍິ່ງໃຫຍ່ ແລະ ໜ້າອັດສະຈັນຫລາຍຈົນຂຽນມັນໄວ້ບໍ່ໄດ້, ທັງມະນຸດຈະ ເອີ່ຍບໍ່ໄດ້.	Nevertheless, so great and marvelous were the words which he prayed that they cannot be written, neither can they be uttered by man.
๘๙	ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພຣະເຢຊູຈົບການ ອະທິຖານແລ້ວ, ແລະ ພຣະອົງໄດ້ສະເດັດມາຫາສານຸສິດອີກ, ແລະ ໄດ້ກ່າວກັບພວກເພິ່ນວ່າ: ເຮົາບໍ່ເຄີຍເຫັນ ສັດທາອັນແຮງກ້າເຊັ່ນນີ້ໃນບັນດາຊາວຢິວເລີຍ; ດັ່ງນັ້ນເຮົາຈຶ່ງສະແດງສິ່ງມະຫັດສະຈັນອັນຍິ່ງໃຫຍ່ເຊັ່ນນີ້ກັບພວກເຂົາບໍ່ໄດ້, ເພາະ ຄວາມ ບໍ່ເຊື່ອຖືຂອງພວກເຂົາ.	And it came to pass that when Jesus had made an end of praying he came again to the disciples, and said unto them: So great faith have I never seen among all the Jews; wherefore I could not show unto them so great miracles, because of their unbelief.
๙๐	ຕາມຈິງແລ້ວ ເຮົາກ່າວກັບເຈົ້າວ່າ, ບໍ່ມີຜູ້ໃດເລີຍໃນບັນດາຊາວຢິວທີ່ເຄີຍເຫັນສິ່ງອັນຍິ່ງໃຫຍ່ດັ່ງທີ່ເຈົ້າໄດ້ເຫັນມານີ້; ທັງພວກເຂົາບໍ່ເຄີຍໄດ້ຍິນເລື່ອງທີ່ຍິ່ງໃຫຍ່ເຊັ່ນນີ້ດັ່ງທີ່ເຈົ້າໄດ້ຍິນ.	Verily I say unto you, there are none of them that have seen so great things as ye have seen; neither have they heard so great things as ye have heard.

ນິ ນີໄຟ ๘๐

3 Nephi 20

๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະອົງໄດ້ບັນຊາໃຫ້ຝູງຊົນ ເຊົາອະທິຖານ, ແລະ ສານຸສິດຂອງພຣະອົງກໍຄືກັນ. ແລະ ພຣະອົງໄດ້ບັນຊາພວກເຂົາວ່າ ພວກເຂົາບໍ່ຄວນເຊົາ ອະທິຖານ ຢູ່ໃນໃຈຂອງພວກເຂົາ.

And it came to pass that he commanded the multitude that they should cease to pray, and also his disciples. And he commanded them that they should not cease to pray in their hearts.

๒ ແລະ ພຣະອົງໄດ້ບັນຊາໃຫ້ພວກເຂົາລຸກຢືນຂຶ້ນ. ແລະ ພວກ ເຂົາກໍໄດ້ລຸກຢືນຂຶ້ນ.

And he commanded them that they should arise and stand up upon their feet. And they arose up and stood upon their feet.

๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະອົງໄດ້ຫັກເຂົ້າຈີ່ອີກ ເທື່ອໜຶ່ງ ແລະ ໃຫ້ພອນແກ່ມັນ, ແລະ ເອົາໃຫ້ສານຸສິດກິນ.

And it came to pass that he brake bread again and blessed it, and gave to the disciples to eat.

๔ ແລະ ເມື່ອພວກເພີ່ນໄດ້ກິນແລ້ວ ພຣະອົງໄດ້ບັນຊາໃຫ້ພວກ ເພີ່ນຫັກເຂົ້າຈີ່, ແລະ ເອົາໃຫ້ຝູງຊົນກິນ.

And when they had eaten he commanded them that they should break bread, and give unto the multitude.

๕ ແລະ ເມື່ອພວກເພີ່ນໄດ້ເອົາໃຫ້ຝູງຊົນແລ້ວ ພຣະອົງເອົາ ເຫລົ້າອະງຸ່ນໃຫ້ພວກເພີ່ນດື່ມນຳອີກ, ແລະ ບັນຊາໃຫ້ພວກ ເພີ່ນເອົາໃຫ້ຝູງຊົນດື່ມ.

And when they had given unto the multitude he also gave them wine to drink, and commanded them that they should give unto the multitude.

๖ ບັດນີ້, ທັງສານຸສິດ ແລະ ຝູງຊົນບໍ່ໄດ້ເອົາ ເຂົ້າຈີ່ ແລະ ເຫລົ້າ ອະງຸ່ນມາໃຫ້ພຣະອົງ;

Now, there had been no bread, neither wine, brought by the disciples, neither by the multitude;

๗ ແຕ່ພຣະອົງໄດ້ ເອົາເຂົ້າຈີ່ໃຫ້ແກ່ຄົນເຫລົ່ານັ້ນກິນ, ແລະ ໄດ້ ເອົາເຫລົ້າອະງຸ່ນໃຫ້ແກ່ຄົນເຫລົ່ານັ້ນດື່ມອີກ.

But he truly gave unto them bread to eat, and also wine to drink.

๘ ແລະ ພຣະອົງໄດ້ກ່າວກັບພວກເຂົາວ່າ: ຄົນໃດທີ່ໄດ້ ກິນເຂົ້າ ຈີ່ຈາກປ່ຽງນີ້ກໍເທົ່າກັບວ່າ ເຂົາໄດ້ກິນເນື້ອກາຍຂອງເຮົາເຂົ້າໄປ ສູ່ຈິດວິນຍານຂອງເຂົາ; ແລະ ຄົນໃດທີ່ໄດ້ດື່ມເຫລົ້າອະງຸ່ນຈາກ ຈອກນີ້ ກໍເທົ່າກັບວ່າເຂົາໄດ້ດື່ມເລືອດຂອງເຮົາເຂົ້າໄປສູ່ ຈິດວິນຍານຂອງເຂົາ; ແລະ ຈິດວິນຍານຂອງເຂົາຈະບໍ່ຫິວ ຫລື ກະຫາຍ, ແຕ່ຈະອີ່ມ.

And he said unto them: He that eateth this bread eateth of my body to his soul; and he that drinketh of this wine drinketh of my blood to his soul; and his soul shall never hunger nor thirst, but shall be filled.

๙ ບັດນີ້, ເມື່ອຝູງຊົນໄດ້ກິນ ແລະ ດື່ມກັນໝົດທຸກຄົນແລ້ວ, ຈົ່ງ ເບິ່ງ, ພວກເຂົາເຕັມໄປດ້ວຍພຣະວິນຍານ; ແລະ ພວກເຂົາໄດ້ ຮ້ອງອອກມາເປັນສຽງດຽວກັນ ແລະ ຖວາຍບາລະມີແດ່ ພຣະເຢຊູ ຜູ້ທີ່ພວກເຂົາທັງໄດ້ເຫັນ ແລະ ໄດ້ຍິນສຽງ.

Now, when the multitude had all eaten and drunk, behold, they were filled with the Spirit; and they did cry out with one voice, and gave glory to Jesus, whom they both saw and heard.

๑๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພວກເຂົາທຸກຄົນໄດ້ ຖວາຍບາລະມີແດ່ພຣະເຢຊູແລ້ວ, ພຣະອົງໄດ້ກ່າວກັບພວກ ເຂົາວ່າ: ຈົ່ງເບິ່ງ ບັດນີ້ເຮົາໄດ້ເຮັດໃຫ້ພຣະບັນຍັດຊຶ່ງພຣະບິດາ ບັນຊາເຮົາກ່ຽວກັບຜູ້ຄົນພວກນີ້ສຳເລັດແລ້ວ, ຜູ້ຊຶ່ງເປັນຜູ້ທີ່ ເຫລືອຢູ່ຂອງເຊື້ອສາຍອິດສະຣາເອນ.

And it came to pass that when they had all given glory unto Jesus, he said unto them: Behold now I finish the commandment which the Father hath commanded me concerning this people, who are a remnant of the house of Israel.

๑๑ ເຈົ້າຄົງຈຳໄດ້ວ່າ ເຮົາໄດ້ກ່າວກັບເຈົ້າ, ແລະ ເວົ້າວ່າເມື່ອ ຄຳ ຂອງ ເອຊາຢາຈະສຳເລັດ—ຈົ່ງເບິ່ງ ມັນມີຂຽນໄວ້, ເຈົ້າມີມັນຢູ່ຕໍ່ ໜ້າເຈົ້າ, ສະນັ້ນ ຈົ່ງຄົ້ນຄວ້າມັນ—

Ye remember that I spake unto you, and said that when the words of Isaiah should be fulfilled—behold they are written, ye have them before you, therefore search them—

ແລະ ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບເຈົ້າ, ວ່າເມື່ອມັນ
ສຳເລັດ ເວລານັ້ນ ພັນທະສັນຍາຊຶ່ງພຣະບິດາໄດ້ເຮັດໄວ້ກັບ
ຜູ້ຄົນຂອງພຣະອົງກໍຈະສຳເລັດ, ໂອ້ ເຊື້ອສາຍອິດສະຣາເອນ.

ແລະ ເມື່ອນັ້ນ ຜູ້ທີ່ເຫລືອຢູ່, ຊຶ່ງໄດ້ແຕກ ກະຈັດກະຈາຍໄປ
ທົ່ວໜ້າແຜ່ນດິນໂລກຈະ ເຕົ້າໂຮມຈາກທາງຕາເວັນອອກ ແລະ
ຈາກທາງຕາເວັນຕົກ, ແລະ ຈາກທາງໃຕ້ ແລະ ຈາກທາງເໜືອ;
ແລະ ພວກເຂົາຈະຖືກນຳມາສູ່ ຄວາມຮູ້ເລື່ອງພຣະຜູ້ເປັນເຈົ້າ
ອົງເປັນພຣະເຈົ້າຂອງພວກເຂົາ ຜູ້ໄດ້ໄຖ່ພວກເຂົາ.

ແລະ ພຣະບິດາໄດ້ບັນຊາເຮົາວ່າ ເຮົາຄວນມອບ ແຜ່ນດິນນີ້
ໃຫ້ເຈົ້າເພື່ອເປັນມູນມໍລະດົກ.

ແລະ ເຮົາກ່າວກັບເຈົ້າ, ວ່າຖ້າຫາກຄົນຕ່າງຊາດບໍ່ ກັບໃຈ
ຫລັງຈາກທີ່ພວກເຂົາໄດ້ຮັບພອນແລ້ວ, ຫລັງຈາກພວກເຂົາ
ໄດ້ເຮັດໃຫ້ຜູ້ຄົນຂອງເຮົາກະຈັດກະຈາຍໄປ—

ເມື່ອນັ້ນເຈົ້າ, ຜູ້ເປັນຜູ້ທີ່ເຫລືອຢູ່ຂອງເຊື້ອສາຍຂອງຢາໂຄບ
ຈະອອກໄປໃນບັນດາພວກເຂົາ; ແລະ ເຈົ້າຈະຢູ່ໃນທ່າມກາງ
ຂອງພວກເຂົາທີ່ມີຈຳນວນຢ່າງຫລວງຫລາຍ; ແລະ ເຈົ້າຈະ
ຢູ່ໃນບັນດາພວກເຂົາເໝືອນດັ່ງສິງຢູ່ໃນບັນດາສັດໃນປ່າ, ແລະ
ດັ່ງ ສິງໜຸ່ມຢູ່ໃນບັນດາຝູງແກະ ຊຶ່ງຖ້າຫາກມັນຜ່ານໄປ ທັງ
ຈະ ຢຽບຍ່ຳ ແລະ ຈີກເປັນຕ່ອນໆ, ແລະ ບໍ່ມີໃຜປົດປ່ອຍໄດ້.

ມືຂອງເຈົ້າຈະຍົກຢູ່ເທິງຜູ້ປໍລະປັກຂອງເຈົ້າ, ແລະ ສັດຕູຂອງ
ເຈົ້າຈະຖືກຕັດອອກໄປທັງໝົດ.

ແລະ ເຮົາຈະ ເຕົ້າໂຮມຜູ້ຄົນຂອງເຮົາເຂົ້າກັນດັ່ງຄົນເຕົ້າໂຮມ
ຟ່ອນເຂົ້າໄວ້ໃນລານ.

ເພາະເຮົາຈະເຮັດໃຫ້ຜູ້ຄົນຂອງເຮົາຜູ້ທີ່ພຣະບິດາໃຫ້ພັນທະ
ສັນຍາ, ແທ້ຈິງແລ້ວ, ເຮົາຈະເຮັດໃຫ້ ເຂົາຂອງເຈົ້າເປັນເຫລັກ,
ແລະ ເຮົາຈະເຮັດໃຫ້ກີບຕີນຂອງເຈົ້າເປັນທອງເຫລືອງ. ແລະ
ເຈົ້າຈະໄດ້ທຸບຕີຄົນຢ່າງຫລວງຫລາຍເປັນຕ່ອນໆ; ແລະ ເຮົາຈະ
ອຸທິດຜົນປະ�โຫຍດຂອງພວກເຂົາແດ່ພຣະຜູ້ເປັນເຈົ້າ ແລະ
ເຂົ້າຂອງ ຂອງພວກເຂົາຖວາຍພຣະຜູ້ເປັນເຈົ້າຂອງທັງ
ແຜ່ນດິນໂລກ. ແລະ ຈົ່ງເບິ່ງ, ເຮົາຄືຜູ້ທີ່ຈະກະທຳສິ່ງນີ້.

ແລະ ເຫດການຈະບັງເກີດຂຶ້ນ, ພຣະບິດາໄດ້ກ່າວ, ວ່າ ດາບ
ແຫ່ງຄວາມຍຸດຕິທຳຂອງເຮົາຈະແຂວນຢູ່ເທິງຫົວຂອງພວກ
ເຂົາໃນມື້ນັ້ນ, ແລະ ຖ້າຫາກພວກເຂົາບໍ່ກັບໃຈ ມັນຈະຟາດຟັນ
ລົງໃສ່ພວກເຂົາ, ພຣະບິດາໄດ້ກ່າວ, ແທ້ຈິງແລ້ວ, ແມ່ນແຕ່ຢູ່
ເທິງຫົວຂອງທຸກປະຊາຊາດຂອງຄົນຕ່າງຊາດ.

ແລະ ເຫດການຈະບັງເກີດຂຶ້ນຄື ເຮົາຈະສະຖາປະນາ ຄົນ
ຂອງເຮົາຂຶ້ນ, ໂອ້ ເຊື້ອສາຍອິດສະຣາເອນ.

And verily, verily, I say unto you, that when they shall be fulfilled then is the fulfilling of the covenant which the Father hath made unto his people, O house of Israel.

And then shall the remnants, which shall be scattered abroad upon the face of the earth, be gathered in from the east and from the west, and from the south and from the north; and they shall be brought to the knowledge of the Lord their God, who hath redeemed them.

And the Father hath commanded me that I should give unto you this land, for your inheritance.

And I say unto you, that if the Gentiles do not repent after the blessing which they shall receive, after they have scattered my people—

Then shall ye, who are a remnant of the house of Jacob, go forth among them; and ye shall be in the midst of them who shall be many; and ye shall be among them as a lion among the beasts of the forest, and as a young lion among the flocks of sheep, who, if he goeth through both treadeth down and teareth in pieces, and none can deliver.

Thy hand shall be lifted up upon thine adversaries, and all thine enemies shall be cut off.

And I will gather my people together as a man gathereth his sheaves into the floor.

For I will make my people with whom the Father hath covenanted, yea, I will make thy horn iron, and I will make thy hoofs brass. And thou shalt beat in pieces many people; and I will consecrate their gain unto the Lord, and their substance unto the Lord of the whole earth. And behold, I am he who doeth it.

And it shall come to pass, saith the Father, that the sword of my justice shall hang over them at that day; and except they repent it shall fall upon them, saith the Father, yea, even upon all the nations of the Gentiles.

And it shall come to pass that I will establish my people, O house of Israel.

ຄ ແລະ ຈົ່ງເບິ່ງ, ເຮົາຈະສະຖາປະນາຜູ້ຄົນພວກນີ້ຂຶ້ນໃນ ແຜ່ນດິນນີ້, ເພື່ອໃຫ້ ພັນທະສັນຍາຊຶ່ງເຮົາໄດ້ເຮັດໄວ້ກັບ ຢາໂຄບບັນພະບຸດລຸດຂອງເຈົ້າສຳເລັດ; ແລະ ມັນຈະເປັນ ເຢຣູຊາເລັມໃໝ່. ແລະ ອຳນາດຂອງສະຫວັນຈະມາຢູ່ທ່າມກາງ ຜູ້ຄົນພວກນີ້; ແທ້ຈິງແລ້ວ, ແມ່ນແຕ່ ເຮົາຈະຢູ່ໃນທ່າມກາງ ພວກເຈົ້າ.

And behold, this people will I establish in this land, unto the fulfilling of the covenant which I made with your father Jacob; and it shall be a New Jerusalem. And the powers of heaven shall be in the midst of this people; yea, even I will be in the midst of you.

ຄ ຈົ່ງເບິ່ງ, ເຮົາຄືຜູ້ທີ່ໂມເຊເວົ້າເຖິງ, ມີຄວາມວ່າ: ພຣະຜູ້ເປັນ ເຈົ້າອົງເປັນພຣະເຈົ້າຂອງເຈົ້າຈະຍົກ ສາດສະດາຜູ້ໜຶ່ງຂຶ້ນຈາກ ພີ່ນ້ອງຂອງເຈົ້າໃຫ້ແກ່ເຈົ້າ ທີ່ເໝືອນກັບຂ້າພະເຈົ້າ; ເຈົ້າຈົ່ງຟັງ ຜູ້ນັ້ນໃນທຸກເລື່ອງບໍ່ວ່າຈະເປັນອັນໃດກໍຕາມທີ່ຜູ້ນັ້ນຈະກ່າວ ກັບເຈົ້າ. ແລະ ເຫດການຈະບັງເກີດຂຶ້ນຄື ຜູ້ໃດກໍຕາມທີ່ບໍ່ຟັງ ຖ້ອຍຄຳຂອງສາດສະດາ ຜູ້ນັ້ນຈະຖືກຕັດອອກຈາກບັນດາ ຜູ້ຄົນ.

Behold, I am he of whom Moses spake, saying: A prophet shall the Lord your God raise up unto you of your brethren, like unto me; him shall ye hear in all things whatsoever he shall say unto you. And it shall come to pass that every soul who will not hear that prophet shall be cut off from among the people.

ຄ ຕາມຈິງແລ້ວເຮົາກ່າວກັບເຈົ້າວ່າ, ແລະ ສາດສະດາ ທັງໝົດ ນັບຕັ້ງແຕ່ຊາມູເອນ ແລະ ຄົນອື່ນໆຕໍ່ຈາກນັ້ນມາຫລາຍຕໍ່ ຫລາຍຄົນກໍໄດ້ເວົ້າ ແລະ ໃຫ້ຖ້ອຍຄຳເຖິງເຮົາ.

Verily I say unto you, yea, and all the prophets from Samuel and those that follow after, as many as have spoken, have testified of me.

ຄ ແລະ ຈົ່ງເບິ່ງ, ເຈົ້າເປັນລູກຫລານຂອງສາດສະດາ; ແລະ ເຈົ້າ ເປັນເຊື້ອສາຍອິດສະຣາເອນ; ແລະ ເຈົ້າຢູ່ໃນ ພັນທະສັນຍາ ຊຶ່ງ ພຣະບິດາໄດ້ເຮັດໄວ້ກັບບັນພະບຸລຸດຂອງເຈົ້າ, ເມື່ອພຣະອົງ ກ່າວກັບອັບຣາຮາມວ່າ: ແລະ ໃນລູກຫລານຂອງເຈົ້າ ທຸກ ຕະກຸນຂອງແຜ່ນດິນໂລກຈະໄດ້ຮັບພອນ.

And behold, ye are the children of the prophets; and ye are of the house of Israel; and ye are of the covenant which the Father made with your fathers, saying unto Abraham: And in thy seed shall all the kindreds of the earth be blessed.

ຄ ພຣະບິດາຍົກເຮົາໃຫ້ກັບເຈົ້າກ່ອນ, ແລະ ສົ່ງເຮົາມາໃຫ້ພອນ ແກ່ເຈົ້າໃນການເຮັດໃຫ້ເຈົ້າທຸກຄົນ ຫັນໜີຈາກຄວາມຊົ່ວຮ້າຍ ຂອງເຈົ້າ; ແລະ ນີ້ກໍເພາະວ່າເຈົ້າເປັນລູກຫລານແຫ່ງພັນທະ ສັນຍາ—

The Father having raised me up unto you first, and sent me to bless you in turning away every one of you from his iniquities; and this because ye are the children of the covenant—

ຄ ແລະ ຫລັງຈາກທີ່ເຈົ້າໄດ້ຮັບພອນແລ້ວ ເມື່ອນັ້ນພຣະບິດາ ຈະໃຫ້ພັນທະສັນຍາຊຶ່ງພຣະອົງໄດ້ກະທຳໄວ້ກັບອັບຣາຮາມ ສຳເລັດ, ມີຄວາມວ່າ: ໃນລູກຫລານຂອງເຈົ້າ ທຸກຕະກຸນຂອງ ແຜ່ນດິນໂລກຈະໄດ້ຮັບພອນ—ເພື່ອການເທພຣະວິນຍານ ບໍລິສຸດລົງມາເທິງຄົນຕ່າງຊາດໂດຍທາງເຮົາ, ຊຶ່ງພອນທີ່ມີຢູ່ ກັບ ຄົນຕ່າງຊາດນັ້ນຈະເຮັດໃຫ້ພວກເຂົາຍິ່ງໃຫຍ່ເໜືອຄົນ ທັງປວງ, ຈົນເຮັດໃຫ້ຜູ້ຄົນຂອງເຮົາກະຈັດກະຈາຍໄປ, ໂອ້ ເຊື້ອສາຍອິດສະຣາເອນ.

And after that ye were blessed then fulfilleth the Father the covenant which he made with Abraham, saying: In thy seed shall all the kindreds of the earth be blessed—unto the pouring out of the Holy Ghost through me upon the Gentiles, which blessing upon the Gentiles shall make them mighty above all, unto the scattering of my people, O house of Israel.

ຄ ແລະ ພວກເຂົາຈະເປັນ ໄພພິບັດຕໍ່ຜູ້ຄົນຂອງແຜ່ນດິນນີ້. ແຕ່ເຖິງຢ່າງໃດກໍຕາມ, ເມື່ອພວກເຂົາໄດ້ຮັບຄວາມສົມບູນແຫ່ງ ພຣະກິດຕິຄຸນຂອງເຮົາແລ້ວ, ເມື່ອນັ້ນຖ້າຫາກພວກເຂົາຍັງ ເຮັດໃຈແຂງກະດ້າງກັບເຮົາຢູ່, ເຮົາຈະສົ່ງຄວາມຊົ່ວຮ້າຍຂອງ ພວກເຂົາກັບຄືນໃສ່ຫົວຂອງພວກເຂົາ, ພຣະບິດາໄດ້ກ່າວ.

And they shall be a scourge unto the people of this land. Nevertheless, when they shall have received the fulness of my gospel, then if they shall harden their hearts against me I will return their iniquities upon their own heads, saith the Father.

๘ฌ	ແລະ ເຮົາຈະ ນึกເຖິງພັນທະສັນຍາຊึ่ງເຮົາໄດ້ກະທຳໄວ້ກັບ ຜູ້ຄົນຂອງເຮົາ; ແລະ ເຮົາໄດ້ໃຫ້ພັນທະສັນຍາກັບພວກເຂົາວ່າ ເຮົາຈະ ເຕົ້າໂຮມພວກເຂົາໃນເວລາອັນເໝາະສົມຂອງເຮົາ, ວ່າ ເຮົາຈະມອບ ແຜ່ນດິນຂອງບັນພະບຸລຸດຂອງພວກເຂົາໃຫ້ແກ່ ພວກເຂົາຄືນຄືເກົ່າເປັນມູນມໍລະດົກ ຄືແຜ່ນດິນ ເຢຣູຊາເລັມ, ຊึ่ງເປັນແຜ່ນດິນແຫ່ງຄຳສັນຍາຂອງພວກເຂົາຕະຫລອດໄປ, ພຣະບິດາໄດ້ກ່າວ.	And I will remember the covenant which I have made with my people; and I have covenanted with them that I would gather them together in mine own due time, that I would give unto them again the land of their fathers for their inheritance, which is the land of Jerusalem, which is the promised land unto them forever, saith the Father.
๓๐	ແລະ ເຫດການຈະບັງເກີດຂึ้ນຄື ວັນເວລາຈະມາເຖິງ, ເມື່ອ ຄວາມສົມບູນແຫ່ງພຣະກິດຕິຄຸນຂອງເຮົາຈະໄດ້ຖືກສັ່ງສອນ ໃຫ້ແກ່ພວກເຂົາ;	And it shall come to pass that the time cometh, when the fulness of my gospel shall be preached unto them;
๓๑	ແລະ ພວກເຂົາຈະ ເຊື່ອໃນເຮົາ, ວ່າເຮົາຄືພຣະເຢຊູຄຣິດ, ພຣະບุດຂອງພຣະເจ้า, ແລະ ຈະອະທິຖານຫາພຣະບິດາ ໃນນາມຂອງເຮົາ.	And they shall believe in me, that I am Jesus Christ, the Son of God, and shall pray unto the Father in my name.
๓๒	ເມື່ອນັ້ນ ຄົນຍາມກໍຈະເປັ່ງສຽງ, ແລະ ພວກເຂົາຈະເປັ່ງສຽງ ໂຮร้ອງນຳກັນ; ເພາະວ່າພວກເຂົາຈະເຫັນດ້ວຍຕາ.	Then shall their watchmen lift up their voice, and with the voice together shall they sing; for they shall see eye to eye.
๓๓	ເມື່ອນັ້ນ ພຣະບິດາຈະເຕົ້າໂຮມພວກເຂົາເຂົ້າກັນອีກ, ແລະ ປะທານເຢຣູຊາເລັມໃຫ້ພວກເຂົາ ເພື່ອເປັນແຜ່ນດິນມູນ ມໍລະດົກຂອງພວກເຂົາ.	Then will the Father gather them together again, and give unto them Jerusalem for the land of their inheritance.
๓๔	ເມື່ອນັ້ນພວກເຂົາຈະເປັ່ງສຽງດ້ວຍຄວາມຊື่ນຊົມ—ຮ້ອງ ເພງນຳກັນ, ກุງເຢຣູຊາເລັມເອີຍ ເจ้าຜູ້ທີ່ເປັນເມືອງຮົກຮ້າງ; ເພາະພຣະບິດາໄດ້ອອຍໃຈຜູ້ຄົນຂອງພຣະອົງແລ້ວ, ພຣະອົງ ໄດ້ໄຖ່ກุງເຢຣູຊາເລັມແລ້ວ.	Then shall they break forth into joy—Sing together, ye waste places of Jerusalem; for the Father hath comforted his people, he hath redeemed Jerusalem.
๓๕	ພຣະບິດາໄດ້ກາງແຂນອັນສັກສิດຂອງພຣະອົງໃນສายตา ຂອງປะຊาชาດທັງປວງ; ແລະ ທົ່ວທີ່ສุດຂອງແຜ່ນດິນໂລກຈະ ເຫັນການຊ່ວຍໃຫ້ລອດຂອງພຣະບິດາ; ແລະ ພຣະບິດາກับ ເຮົາເປັນໜึ่ງ.	The Father hath made bare his holy arm in the eyes of all the nations; and all the ends of the earth shall see the salvation of the Father; and the Father and I are one.
๓๖	ແລະ ເມື່ອນັ້ນເລื่ອງທີ່ມีຂຽນໄວ້ຈะบังเกิดขึ้น: ຈົ່ງ ຕื่ນເถิด, ຈົ່ງຕื่ນຂึ้นอีก, ແລະ ຈົ່ງມีຄວາມເຂັ້ມແຂງ, ໂอ้ ซีโอน; ຈົ່ງນุ่ง ຫົ່ມເสื้อผ้าอันสวยงามเถิด, โอ้ ເຢຣູຊาเลัมนะถอนสักสิด ເอีย, ເพาะว่านับแต่นี้ต่ไปจะบ่มีผู้ใดที่สึกกะปึก และ บ่ ສะอาดเข้ามาหาเจ้าอีกต่ไป.	And then shall be brought to pass that which is written: Awake, awake again, and put on thy strength, O Zion; put on thy beautiful garments, O Jerusalem, the holy city, for henceforth there shall no more come into thee the uncircumcised and the unclean.
๓๗	ຈົ່ງลุกขึ้นจากฝุ่นดิน; ຈົ่ງลุกขึ้น, นั่งลง, โอ้ ເຢຣูซาเลัม; ຈົ່ງปิดตัวออกจากปอกคอ, โอ้ ທิดาผู้ถูกจ่องจำของ ซีโอน.	Shake thyself from the dust; arise, sit down, O Jerusalem; loose thyself from the bands of thy neck, O captive daughter of Zion.
๓๘	ເพาะพระผู้เป็นเจ้าได้กล่าวดังนี้: เจ้าได้ขายตัวไปล้าๆ, ແລະ ເจ้าจะถูกไถ่โดยบ่ต้องเสยเงิน.	For thus saith the Lord: Ye have sold yourselves for naught, and ye shall be redeemed without money.
๓๙	ຕามจิง, ตามจิงแล้ว, ເรำกล่าวกับเจ้า, ว่าผู้ถืนของเรำ จะรู้จักชื่เรำ; แท้จิงแล้ว, ในมื้นั้นพวกเขำจะรู้ว่า ເรำคือ ถืนที่เอ้ำ.	Verily, verily, I say unto you, that my people shall know my name; yea, in that day they shall know that I am he that doth speak.

๔๐ ແລະ ເມື່ອນັ້ນພວກເຂົາຈະເວົ້າວ່າ: ຕີນຂອງຜູ້ທີ່ຢູ່ເທິງພູນັ້ນງາມ ພຽງໃດ ຜູ້ທີ່ໄດ້ນຳເອົາຂ່າວປະເສີດມາ; ທີ່ໄດ້ ປະກາດ ສັນຕິສຸກ; ທີ່ນຳເອົາຂ່າວປະເສີດຂອງຄວາມດີມາ, ທີ່ປະກາດ ຄວາມລອດ; ທີ່ກ່າວກັບຊີໂອນວ່າ: ພຣະເຈົ້າຂອງເຈົ້າຊົງ ປົກຄອງ;

And then shall they say: How beautiful upon the mountains are the feet of him that bringeth good tidings unto them, that publisheth peace; that bringeth good tidings unto them of good, that publisheth salvation; that saith unto Zion: Thy God reigneth!

๔๑ ແລະ ເມື່ອນັ້ນຈະມີສຽງຮ້ອງ ອອກໄປว่า: ເຈົ້າຈົ່ງອອກໄປ, ເຈົ້າຈົ່ງອອກໄປ, ເຈົ້າຈົ່ງອອກໄປຈາກບ່ອນນັ້ນ, ຢ່າແຕະຕ້ອງສິ່ງ ທີ່ ບໍ່ສະອາດ; ຈົ່ງອອກໄປຈາກທ່າມກາງຂອງມັນ; ເຈົ້າທີ່ຖື ພາຊະນະຂອງພຣະຜູ້ເປັນເຈົ້າຈົ່ງຮັກສາຕົວ ໃຫ້ສະອາດ.

And then shall a cry go forth: Depart ye, depart ye, go ye out from thence, touch not that which is unclean; go ye out of the midst of her; be ye clean that bear the vessels of the Lord.

๔๒ ເພາະເຈົ້າ ບໍ່ຕ້ອງຟ້າວອອກໄປ ຫລື ບໍ່ຕ້ອງຫລົບໜີໄປ; ເພາະພຣະຜູ້ເປັນເຈົ້າຈະນຳໜ້າເຈົ້າໄປ, ແລະ ພຣະເຈົ້າຂອງ ອິດສະຣາເອນຈະຮັກສາທາງຫລັງຂອງເຈົ້າ.

For ye shall not go out with haste nor go by flight; for the Lord will go before you, and the God of Israel shall be your rearward.

๔๓ ຈົ່ງເບິ່ງ, ຂ້າໃຊ້ຂອງເຮົາຈະເຮັດພາລະກິດຂອງຕົນຢ່າງ ຮອບຄອບ; ລາວຈະເປັນຜູ້ຍິ່ງໃຫຍ່ ແລະ ມີກຽດອັນສູງສົ່ງ.

Behold, my servant shall deal prudently; he shall be exalted and extolled and be very high.

๔๔ ດັ່ງທີ່ຫລາຍຕໍ່ຫລາຍຄົນແປກໃຈໃນຕົວເຈົ້າ—ໜ້າຕາຂອງ ລາວບາດເຈັບຫລາຍກວ່າຄົນອື່ນ, ແລະ ຮ່າງກາຍຂອງລາວ ບາດເຈັບຫລາຍກວ່າບຸດຂອງມະນຸດ—

As many were astonished at thee—his visage was so marred, more than any man, and his form more than the sons of men—

๔๕ ແຕ່ລາວຈະເຮັດໃຫ້ຊົນຊາດທັງຫລາຍ ອັດສະຈັນໃຈ; ກະສັດ ຈະປາກບໍ່ອອກ; ເພາະພວກເພີ່ນຈະໄດ້ເຫັນສິ່ງທີ່ບໍ່ເຄີຍ ບອກເລົ່າ; ແລະ ພວກເພີ່ນຈະພິຈາລະນາສິ່ງທີ່ບໍ່ເຄີຍໄດ້ຍິນ.

So shall he sprinkle many nations; the kings shall shut their mouths at him, for that which had not been told them shall they see; and that which they had not heard shall they consider.

๔๖ ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບເຈົ້າ, ສິ່ງທັງໝົດນີ້ຈະ ມາເຖິງຢ່າງແນ່ນອນຕາມທີ່ພຣະບິດາໄດ້ບັນຊາເຮົາ. ເມື່ອນັ້ນ ພັນທະສັນຍາທີ່ພຣະບິດາໄດ້ໃຫ້ໄວ້ກັບຜູ້ຄົນຂອງພຣະອົງຈະ ສຳເລັດ; ແລະ ເມື່ອນັ້ນ ເຢຣູຊາເລັມຈະມີຜູ້ຄົນຂອງເຮົາອາໄສຢູ່ ອີກ, ແລະ ມັນຈະເປັນແຜ່ນດິນມູນມໍລະດົກຂອງພວກເຂົາ.

Verily, verily, I say unto you, all these things shall surely come, even as the Father hath commanded me. Then shall this covenant which the Father hath covenanted with his people be fulfilled; and then shall Jerusalem be inhabited again with my people, and it shall be the land of their inheritance.

ມໍ ນີໄຟ ๘๑

๑ ແລະ ຕາມຈິງແລ້ວເຮົາກ່າວກັບເຈົ້າວ່າ ເຮົາຈະໃຫ້ເຄື່ອງໝາຍ ແກ່ເຈົ້າ, ເພື່ອເຈົ້າຈະໄດ້ຮູ້ໃນ ເວລາທີ່ສິ່ງເຫລົ່ານີ້ຈະເກີດຂຶ້ນ—ຄື ເຮົາຈະເຕົ້າໂຮມຜູ້ຄົນຂອງເຮົາຈາກການແຕກກະຈັດກະຈາຍໄປ ເປັນເວລາຄົນນານຂອງພວກເຂົາ, ໂອ້ ເຊື້ອສາຍອິດສະຣາເອນ, ແລະ ຈະສະຖາປະນາຊີໂອນຂອງເຮົາຂຶ້ນໃນບັນດາພວກເຂົາ ອີກ;

๒ ແລະ ຈົ່ງເບິ່ງນີ້ຄືສິ່ງທີ່ເຮົາຈະໃຫ້ແກ່ເຈົ້າເປັນເຄື່ອງໝາຍ—ເພາະ ຕາມຈິງແລ້ວເຮົາກ່າວກັບເຈົ້າວ່າ ເມື່ອສິ່ງເຫລົ່ານີ້ ຊຶ່ງເຮົາ ໄດ້ປະກາດແກ່ເຈົ້າ, ແລະ ສິ່ງທີ່ເຮົາຈະປະກາດແກ່ເຈົ້າກ່ຽວກັບ ຕົວເຮົາເອງຕໍ່ຈາກນີ້ໄປ, ແລະ ໂດຍອຳນາດຂອງພຣະວິນຍານ ບໍລິສຸດ ຊຶ່ງເຈົ້າຈະໄດ້ຮັບຈາກພຣະບິດາຈະເປັນທີ່ຮູ້ຈັກແກ່ຄົນ ຕ່າງຊາດ ເພື່ອພວກເຂົາຈະໄດ້ຮູ້ກ່ຽວກັບຜູ້ຄົນພວກນີ້ ຊຶ່ງເປັນ ຜູ້ທີ່ເຫລືອຢູ່ຂອງເຊື້ອສາຍຂອງຢາໂຄບ, ແລະ ກ່ຽວກັບຜູ້ຄົນ ພວກນີ້ຂອງເຮົາ ຜູ້ທີ່ຈະຖືກພວກເຂົາເຮັດໃຫ້ແຕກກະຈັດ ກະຈາຍໄປ;

๓ ຕາມຈິງ, ຕາມຈິງແລ້ວ, ເຮົາກ່າວກັບເຈົ້າ, ເມື່ອ ເລື່ອງເຫລົ່າ ນີ້ຈະເປັນທີ່ຮູ້ແກ່ພວກເຂົາຈາກພຣະບິດາ, ແລະ ຈະອອກ ມາຈາກພຣະບິດາ, ຈາກພວກເຂົາມາເຖິງເຈົ້າ;

๔ ເພາະມັນເປັນຄວາມສະຫລຽວສະຫລາດຂອງພຣະບິດາທີ່ ພວກເຂົາສົມຄວນຖືກສະຖາປະນາຂຶ້ນໃນແຜ່ນດິນນີ້, ແລະ ຈັດຕັ້ງໃຫ້ເປັນຜູ້ຄົນທີ່ມີ ອິດສະລະພາບໂດຍອຳນາດຂອງ ພຣະບິດາ, ເພື່ອສິ່ງເຫລົ່ານີ້ຈະໄດ້ອອກມາຈາກພວກເຂົາມາຫາ ຜູ້ທີ່ເຫລືອຢູ່ຂອງລູກຫລານຂອງເຈົ້າ, ເພື່ອ ພັນທະສັນຍາຂອງ ພຣະບິດາຊຶ່ງໃຫ້ໄວ້ກັບຜູ້ຄົນຂອງພຣະອົງຈະສຳເລັດ, ໂອ້ ເຊື້ອສາຍອິດສະຣາເອນ;

๕ ສະນັ້ນ, ວຽກງານເຫລົ່ານີ້ ແລະ ວຽກງານທີ່ຈະມາເຖິງໃນ ບັນດາພວກເຈົ້ານັບແຕ່ນີ້ໄປຈະອອກມາ ຈາກຄົນຕ່າງຊາດ, ແລະ ມາຫາ ລູກຫລານຂອງເຈົ້າ ຊຶ່ງຈະເສື່ອມໂຊມຢູ່ໃນຄວາມບໍ່ ເຊື່ອຖືເພາະຄວາມຊົ່ວຮ້າຍ;

๖ ເພາະພຣະບິດາເຫັນດັ່ງນັ້ນ ວ່າມັນຄວນອອກມາຈາກ ຄົນ ຕ່າງຊາດ, ເພື່ອພຣະອົງຈະໄດ້ສະແດງອຳນາດຂອງພຣະອົງຕໍ່ ຄົນຕ່າງຊາດ, ເພື່ອດ້ວຍເຫດ ຄືຖ້າຫາກຄົນຕ່າງຊາດຈະບໍ່ເຮັດ ໃຈແຂງກະດ້າງ, ວ່າພວກເຂົາຈະກັບໃຈ ແລະ ມາຫາເຮົາ ແລະ ຮັບບັບຕິສະມາໃນນາມຂອງເຮົາ, ແລະ ຮູ້ເຖິງຫລັກທຳອັນແທ້ ຈິງຂອງຄຳສອນຂອງເຮົາ, ເພື່ອພວກເຂົາຈະໄດ້ ນັບເຂົ້າຢູ່ໃນ ບັນດາຜູ້ຄົນຂອງເຮົາ, ໂອ້ ເຊື້ອສາຍອິດສະຣາເອນ;

3 Nephi 21

And verily I say unto you, I give unto you a sign, that ye may know the time when these things shall be about to take place—that I shall gather in, from their long dispersion, my people, O house of Israel, and shall establish again among them my Zion;

And behold, this is the thing which I will give unto you for a sign—for verily I say unto you that when these things which I declare unto you, and which I shall declare unto you hereafter of myself, and by the power of the Holy Ghost which shall be given unto you of the Father, shall be made known unto the Gentiles that they may know concerning this people who are a remnant of the house of Jacob, and concerning this my people who shall be scattered by them;

Verily, verily, I say unto you, when these things shall be made known unto them of the Father, and shall come forth of the Father, from them unto you;

For it is wisdom in the Father that they should be established in this land, and be set up as a free people by the power of the Father, that these things might come forth from them unto a remnant of your seed, that the covenant of the Father may be fulfilled which he hath covenanted with his people, O house of Israel;

Therefore, when these works and the works which shall be wrought among you hereafter shall come forth from the Gentiles, unto your seed which shall dwindle in unbelief because of iniquity;

For thus it behooveth the Father that it should come forth from the Gentiles, that he may show forth his power unto the Gentiles, for this cause that the Gentiles, if they will not harden their hearts, that they may repent and come unto me and be baptized in my name and know of the true points of my doctrine, that they may be numbered among my people, O house of Israel;

ກ ແລະ ເມື່ອສິ່ງເຫລົ່ານີ້ເກີດຂຶ້ນຄື ລູກຫລານຂອງເຈົ້າຈະເລີ່ມຮູ້ເລື່ອງເຫລົ່ານີ້—ມັນຈະເປັນເຄື່ອງໝາຍໃຫ້ແກ່ພວກເຂົາ ເພື່ອພວກເຂົາຈະໄດ້ຮູ້ວ່າ ວຽກງານຂອງພຣະບິດາໄດ້ເລີ່ມຕົ້ນແລ້ວ, ເພື່ອເຮັດໃຫ້ພັນທະສັນຍາ ຊຶ່ງພຣະອົງໄດ້ກະທຳໄວ້ກັບຜູ້ຄົນຜູ້ເປັນເຊື້ອສາຍອິດສະຣາເອນສຳເລັດ.

ຂ ແລະ ເມື່ອມື້ນັ້ນມາເຖິງ, ເຫດການຈະບັງເກີດຂຶ້ນຄື ກະສັດຈະປາກບໍ່ອອກ; ເພາະພວກເພີ່ນຈະໄດ້ເຫັນສິ່ງທີ່ບໍ່ເຄີຍບອກເລົ່າ; ແລະ ພວກເພີ່ນຈະພິຈາລະນາສິ່ງທີ່ບໍ່ເຄີຍໄດ້ຍິນ.

ຄ ເພາະວ່າໃນມື້ນັ້ນ ເພື່ອເຮົາພຣະບິດາຈະກະທຳວຽກງານຢ່າງໜຶ່ງ, ຊຶ່ງຈະເປັນວຽກງານອັນຍິ່ງໃຫຍ່ ແລະ ໜ້າອັດສະຈັນໃຈໃນບັນດາພວກເຂົາ; ແລະ ຈະມີຄົນໃນບັນດາພວກເຂົາທີ່ຈະບໍ່ເຊື່ອເລື່ອງນີ້, ເຖິງແມ່ນວ່າຈະມີຄົນມາປະກາດເລື່ອງນີ້ແກ່ເຂົາກໍຕາມ.

And he said unto them: Blessed are ye because ye desired this thing of me; therefore, after that ye are seventy and two years old ye shall come unto me in my kingdom; and with me ye shall find rest.

And when he had spoken unto them, he turned himself unto the three, and said unto them: What will ye that I should do unto you, when I am gone unto the Father?

And they sorrowed in their hearts, for they durst not speak unto him the thing which they desired.

And he said unto them: Behold, I know your thoughts, and ye have desired the thing which John, my beloved, who was with me in my ministry, before that I was lifted up by the Jews, desired of me.

Therefore, more blessed are ye, for ye shall never taste of death; but ye shall live to behold all the doings of the Father unto the children of men, even until all things shall be fulfilled according to the will of the Father, when I shall come in my glory with the powers of heaven.

And ye shall never endure the pains of death; but when I shall come in my glory ye shall be changed in the twinkling of an eye from mortality to immortality; and then shall ye be blessed in the kingdom of my Father.

ຈ ແລະ ອີກຢ່າງໜຶ່ງ, ພວກເຈົ້າຈະບໍ່ມີຄວາມເຈັບປວດເວລາທີ່ ພວກເຈົ້າຢູ່ໃນເນື້ອໜັງ, ທັງບໍ່ມີຄວາມເສົ້າສະຫລົດໃຈ ນອກຈາກຈະເປັນເພາະບາບຂອງໂລກເທົ່ານັ້ນ; ແລະ ທັງໝົດ ນີ້ເຮົາຈະກະທຳໄປເພື່ອສະໜອງຄວາມປາດຖະໜາຂອງພວກ ເຈົ້າ, ເພາະພວກເຈົ້າມີຄວາມປະສົງທີ່ຈະ ຊັກນຳຈິດວິນຍານ ຂອງມະນຸດໃຫ້ມາຫາເຮົາໃນເວລາທີ່ໂລກຍັງຕັ້ງຢູ່.

And again, ye shall not have pain while ye shall dwell in the flesh, neither sorrow save it be for the sins of the world; and all this will I do because of the thing which ye have desired of me, for ye have desired that ye might bring the souls of men unto me, while the world shall stand.

ຈ ແລະ ເພາະເຫດນີ້ ພວກເຈົ້າຈຶ່ງຈະ ເຕັມໄປດ້ວຍຄວາມສຸກ; ແລະ ພວກເຈົ້າຈະໄດ້ນັ່ງລົງໃນອານາຈັກຂອງພຣະບິດາຂອງ ເຮົາ; ແທ້ຈິງແລ້ວ, ຄວາມສຸກຂອງພວກເຈົ້າຈະບໍລິບູນ, ດັ່ງເຊັ່ນ ພຣະບິດາໄດ້ປະທານ ຄວາມສຸກອັນບໍລິບູນໃຫ້ແກ່ເຮົາ; ແລະ ພວກເຈົ້າຈະເປັນດັ່ງເຮົາ, ດັ່ງທີ່ເຮົາເປັນດັ່ງພຣະບິດາ, ແລະ ພຣະບິດາກັບເຮົາເປັນ ໜຶ່ງ;

And for this cause ye shall have fulness of joy; and ye shall sit down in the kingdom of my Father; yea, your joy shall be full, even as the Father hath given me fulness of joy; and ye shall be even as I am, and I am even as the Father; and the Father and I are one;

ຈ ແລະ ພຣະວິນຍານບໍລິສຸດເປັນພະຍານເຖິງພຣະບິດາ ແລະ ເຮົາ; ແລະ ເປັນຍ້ອນເຮົາ ພຣະບິດາຈຶ່ງປະທານພຣະວິນຍານ ບໍລິສຸດໃຫ້ແກ່ລູກຫລານມະນຸດ.

And the Holy Ghost beareth record of the Father and me; and the Father giveth the Holy Ghost unto the children of men, because of me.

ຈ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອພຣະເຢຊູໄດ້ກ່າວ ຂໍ້ຄວາມເຫລົ່ານີ້ແລ້ວ, ພຣະອົງໄດ້ແຕະຕ້ອງພວກເພີ່ນແຕ່ລະ ຄົນດ້ວຍນິ້ວພຣະຫັດຂອງພຣະອົງ ຍົກເວັ້ນແຕ່ສາມຄົນ ຊຶ່ງຈະ ຢູ່ຕໍ່ໄປ, ແລະ ຫລັງຈາກນັ້ນພຣະອົງກໍໄດ້ຈາກໄປ.

And it came to pass that when Jesus had spoken these words, he touched every one of them with his finger save it were the three who were to tarry, and then he departed.

ຈ ແລະ ຈົ່ງເບິ່ງ, ຟ້າສະຫວັນໄດ້ເປີດອອກ, ແລະ ພວກເພີ່ນ ຖືກ ພາຂຶ້ນໄປສະຫວັນ, ແລະ ພວກເພີ່ນໄດ້ເຫັນ ແລະ ໄດ້ຍິນ ເລື່ອງຊຶ່ງບໍ່ອາດຈະເວົ້າໄດ້.

And behold, the heavens were opened, and they were caught up into heaven, and saw and heard unspeakable things.

ຈ ແລະ ພວກເພີ່ນຖືກ ຫ້າມບໍ່ໃຫ້ເວົ້າ; ທັງພວກເພີ່ນບໍ່ໄດ້ຮັບ ອຳນາດໃຫ້ເວົ້າເຖິງເລື່ອງຊຶ່ງພວກເພີ່ນໄດ້ເຫັນ ແລະ ໄດ້ຍິນ ນັ້ນ;

And it was forbidden them that they should utter; neither was it given unto them power that they could utter the things which they saw and heard;

ຈ ແລະ ພວກເພີ່ນບອກບໍ່ໄດ້ວ່າ ພວກເພີ່ນຢູ່ໃນຮ່າງກາຍ ຫລື ຢູ່ນອກຮ່າງກາຍ; ເພາະວ່າພວກເພີ່ນໄດ້ຮູ້ສຶກເໝືອນເປັນ ການ ປ່ຽນສະພາບຂອງຕົນ, ຄືພວກເພີ່ນຖືກປ່ຽນຈາກຮ່າງກາຍ ແຫ່ງເນື້ອໜັງໄປສູ່ສະພາບທີ່ເປັນອະມະຕະ, ເພື່ອພວກເພີ່ນ ຈະໄດ້ເຫັນສິ່ງທີ່ເປັນຂອງພຣະເຈົ້າໄດ້.

And whether they were in the body or out of the body, they could not tell; for it did seem unto them like a transfiguration of them, that they were changed from this body of flesh into an immortal state, that they could behold the things of God.

ຈ ແຕ່ເຫດການໄດ້ບັງເກີດຂຶ້ນຄື ພວກເພີ່ນໄດ້ລົງມາປະຕິບັດ ສາດສະໜາກິດໃນຜືນແຜ່ນດິນໂລກອີກ; ເຖິງຢ່າງໃດກໍຕາມ ພວກເພີ່ນກໍບໍ່ໄດ້ປະຕິບັດກ່ຽວກັບເລື່ອງທີ່ພວກເພີ່ນໄດ້ຍິນ ແລະ ໄດ້ເຫັນມາ, ເພາະມັນເປັນພຣະບັນຊາທີ່ພວກເພີ່ນໄດ້ຮັບ ຈາກສະຫວັນ.

But it came to pass that they did again minister upon the face of the earth; nevertheless they did not minister of the things which they had heard and seen, because of the commandment which was given them in heaven.

ຈ ແລະ ບັດນີ້, ພວກເພີ່ນເປັນມະຕະຢູ່ ຫລື ເປັນອະມະຕະ ຕັ້ງແຕ່ວັນທີ່ປ່ຽນສະພາບຂອງພວກເພີ່ນນັ້ນ, ຂ້າພະເຈົ້າບໍ່ຮູ້;

And now, whether they were mortal or immortal, from the day of their transfiguration, I know not;

ແຕ່ວ່າຂ້າພະເຈົ້າຮູ້ພຽງເທົ່ານີ້ ຕາມບັນທຶກຊຶ່ງໄດ້ຮັບມາ—ພວກເພີ່ນໄດ້ອອກໄປທົ່ວຜືນແຜ່ນດິນ ແລະ ໄດ້ປະຕິບັດສາດສະໜາກິດແກ່ຜູ້ຄົນທັງປວງ, ໄດ້ເຕົ້າໂຮມຫລາຍຕໍ່ຫລາຍຄົນທີ່ເຊື່ອຈາກການສັ່ງສອນຂອງພວກເພີ່ນເຂົ້າມາສູ່ສາດສະໜາຈັກ; ໄດ້ບັບຕິສະມາໃຫ້ພວກເຂົາ, ແລະ ຫລາຍຕໍ່ຫລາຍຄົນທີ່ຮັບບັບຕິສະມານັ້ນໄດ້ຮັບພຣະວິນຍານບໍລິສຸດ.

But this much I know, according to the record which hath been given—they did go forth upon the face of the land, and did minister unto all the people, uniting as many to the church as would believe in their preaching; baptizing them, and as many as were baptized did receive the Holy Ghost.

ແລະ ພວກເພີ່ນໄດ້ຖືກຄົນທີ່ບໍ່ເປັນຂອງສາດສະໜາຈັກຈັບເອົາເຂົ້າຄຸກ. ແລະ ຄຸກກໍຂັງພວກເພີ່ນໄວ້ບໍ່ໄດ້, ເພາະວ່າມັນໄດ້ແຍກອອກເປັນສອງ.

And they were cast into prison by them who did not belong to the church. And the prisons could not hold them, for they were rent in twain.

ແລະ ພວກເພີ່ນຖືກໂຍນລົງໄປໃນແຜ່ນດິນ; ແຕ່ພວກເພີ່ນໄດ້ຕີແຜ່ນດິນດ້ວຍພຣະຄຳຂອງພຣະເຈົ້າ, ເຖິງຂະໜາດທີ່ໂດຍອຳນາດຂອງພຣະອົງ ພວກເພີ່ນໄດ້ຖືກປົດປ່ອຍຈາກຄວາມເລິກຂອງແຜ່ນດິນ; ແລະ ສະນັ້ນ ພວກເຂົາຈຶ່ງບໍ່ສາມາດຂຸດຫລຸມໃຫ້ເລິກພໍທີ່ຈະຂັງພວກເພີ່ນໄວ້ໄດ້.

And they were cast down into the earth; but they did smite the earth with the word of God, insomuch that by his power they were delivered out of the depths of the earth; and therefore they could not dig pits sufficient to hold them.

ແລະ ພວກເພີ່ນຖືກໂຍນເຂົ້າໄປໃນ ເຕົາໄຟສາມເທື່ອ ແລະ ບໍ່ໄດ້ຮັບອັນຕະລາຍ.

And thrice they were cast into a furnace and received no harm.

ແລະ ພວກເພີ່ນຖືກໂຍນເຂົ້າໃນ ຖ້ຳສັດຮ້າຍສອງເທື່ອ; ແລະ ຈົ່ງເບິ່ງ ພວກເພີ່ນໄດ້ຫລິ້ນຢູ່ກັບສັດເຫລົ່ານັ້ນຄືກັນກັບເດັກນ້ອຍຫລິ້ນກັບລູກແກະທີ່ຍັງກິນນົມຢູ່, ແລະ ບໍ່ໄດ້ຮັບອັນຕະລາຍ.

And twice were they cast into a den of wild beasts; and behold they did play with the beasts as a child with a suckling lamb, and received no harm.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເພີ່ນໄດ້ອອກໄປ ດັ່ງນັ້ນໃນບັນດາຜູ້ຄົນຂອງນີໄຟທັງໝົດ, ແລະ ໄດ້ສັ່ງສອນພຣະກິດຕິຄຸນຂອງພຣະຄຣິດໃຫ້ແກ່ຜູ້ຄົນທັງໝົດໃນຜືນແຜ່ນດິນ; ແລະ ພວກເຂົາໄດ້ປ່ຽນໃຈເຫລື້ອມໃສໃນພຣະຜູ້ເປັນເຈົ້າ, ແລະ ໄດ້ຮ່ວມເຂົ້າໃນສາດສະໜາຈັກຂອງພຣະຄຣິດ, ແລະ ຄົນລຸ້ນນັ້ນຈຶ່ງໄດ້ຮັບພອນດັ່ງນີ້ຕາມພຣະຄຳຂອງພຣະເຢຊູ.

And it came to pass that thus they did go forth among all the people of Nephi, and did preach the gospel of Christ unto all people upon the face of the land; and they were converted unto the Lord, and were united unto the church of Christ, and thus the people of that generation were blessed, according to the word of Jesus.

ແລະ ບັດນີ້ຂ້າພະເຈົ້າມໍມອນຂໍຈົບການເວົ້າກ່ຽວກັບເລື່ອງເຫລົ່ານີ້ໄວ້ເທົ່ານີ້ກ່ອນ.

And now I, Mormon, make an end of speaking concerning these things for a time.

ຈົ່ງເບິ່ງ, ຂ້າພະເຈົ້າກຳລັງຈະຂຽນ ຊື່ຂອງຜູ້ທີ່ບໍ່ຕ້ອງຊີມລົດຊາດຂອງຄວາມຕາຍໄວ້, ແຕ່ພຣະຜູ້ເປັນເຈົ້າໄດ້ຫ້າມ ຂ້າພະເຈົ້າບໍ່ໃຫ້ຂຽນ, ສະນັ້ນ ຂ້າພະເຈົ້າຈຶ່ງບໍ່ໄດ້ຂຽນມັນໄວ້ ເພາະວ່າມັນຖືກປົດໄວ້ຈາກໂລກ.

Behold, I was about to write the names of those who were never to taste of death, but the Lord forbade; therefore I write them not, for they are hid from the world.

ແຕ່ຈົ່ງເບິ່ງ, ຂ້າພະເຈົ້າໄດ້ເຫັນພວກເພີ່ນ, ແລະ ພວກເພີ່ນໄດ້ປະຕິບັດສາດສະໜາກິດແກ່ຂ້າພະເຈົ້າ.

But behold, I have seen them, and they have ministered unto me.

ແລະ ຈົ່ງເບິ່ງພວກເພີ່ນຈະຢູ່ໃນບັນດາຄົນຕ່າງຊາດ, ແລະ ຄົນຕ່າງຊາດຈະບໍ່ຮູ້ຈັກພວກເພີ່ນເລີຍ.

And behold they will be among the Gentiles, and the Gentiles shall know them not.

ພວກເພີ່ນຈະຢູ່ໃນບັນດາຊາວຢິວເໝືອນກັນ, ແລະ ຊາວຢິວຈະບໍ່ຮູ້ຈັກພວກເພີ່ນເລີຍ.

They will also be among the Jews, and the Jews shall know them not.

ຄ.ລ ແລະ ເຫດການຈະບັງເກີດຂຶ້ນຄື ເມື່ອພຣະຜູ້ເປັນເຈົ້າເຫັນວ່າ ສົມຄວນໃນຄວາມສະຫລຽວສະຫລາດຂອງພຣະອົງທີ່ພວກ ເພີ່ນຈະປະຕິບັດສາດສະໜາກິດແກ່ເຜົ່າອິດສະຣາເອນທັງໝົດ ທີ່ແຕກ ກະຈັດກະຈາຍກັນໄປ, ແລະ ແກ່ທຸກປະຊາຊາດ, ທຸກ ຕະກຸນ, ທຸກພາສາ, ແລະ ທຸກຜູ້ຄົນທັງປວງ, ແລະ ຈະນຳຄົນ ຢ່າງຫລວງຫລາຍອອກມາຈາກພວກນັ້ນມາຫາພຣະເຢຊູ ເພື່ອຄວາມປາດຖະໜາຂອງພວກເພີ່ນຈະສຳເລັດ, ແລະ ເປັນ ຍ້ອນອຳນາດທີ່ເຮັດໃຫ້ເຊື່ອຂອງພຣະເຈົ້າຊຶ່ງຢູ່ກັບພວກເພີ່ນ.

And it shall come to pass, when the Lord seeth fit in his wisdom that they shall minister unto all the scattered tribes of Israel, and unto all nations, kindreds, tongues and people, and shall bring out of them unto Jesus many souls, that their desire may be fulfilled, and also because of the convincing power of God which is in them.

ມ.ວ ແລະ ພວກເພີ່ນເປັນເໝືອນດັ່ງ ເທລ່ຳທູດຂອງພຣະເຈົ້າ, ແລະ ຖ້າຫາກພວກເພີ່ນຈະອະທິຖານຫາພຣະບິດາໃນພຣະ ນາມຂອງພຣະເຢຊູ ພວກເພີ່ນກໍຈະສາມາດປະກົດຕົວໃຫ້ຜູ້ໃດ ຜູ້ໜຶ່ງເຫັນໄດ້ ຕາມແຕ່ພວກເພີ່ນເຫັນວ່າສົມຄວນ.

And they are as the angels of God, and if they shall pray unto the Father in the name of Jesus they can show themselves unto whatsoever man it seemeth them good.

ມ.ວ.ນ ສະນັ້ນ, ພວກເພີ່ນຈະກະທຳວຽກງານອັນຍິ່ງໃຫຍ່ ແລະ ໜ້າອັດສະຈັນ ກ່ອນມື້ອັນ ຍິ່ງໃຫຍ່ຈະມາເຖິງ ເມື່ອທຸກຜູ້ຄົນຈະ ຕ້ອງມາຢືນຕໍ່ໜ້າບັນລັງພິພາກສາຂອງພຣະຄຣິດຢ່າງ ແນ່ນອນ.

Therefore, great and marvelous works shall be wrought by them, before the great and coming day when all people must surely stand before the judgment-seat of Christ;

ມ.ວ.ສ ແທ້ຈິງແລ້ວ ແມ່ນແຕ່ໃນບັນດາຄົນຕ່າງຊາດ ພວກເພີ່ນຈະ ກະທຳວຽກງານອັນ ຍິ່ງໃຫຍ່ ແລະ ໜ້າອັດສະຈັນ ກ່ອນວັນ ພິພາກສານັ້ນ.

Yea even among the Gentiles shall there be a great and marvelous work wrought by them, before that judgment day.

ມ.ວ.ມ ແລະ ຖ້າຫາກທ່ານມີພຣະຄຳພີທັງໝົດ ຊຶ່ງໃຫ້ເລື່ອງລາວ ກ່ຽວກັບວຽກງານອັນໜ້າອັດສະຈັນໃຈທັງໝົດຂອງ ພຣະຄຣິດ, ທ່ານກໍຈະຮູ້ຕາມພຣະຄຳຂອງພຣະຄຣິດວ່າສິ່ງ ເຫລົ່ານີ້ຈະຕ້ອງເກີດຂຶ້ນຢ່າງແນ່ນອນ.

And if ye had all the scriptures which give an account of all the marvelous works of Christ, ye would, according to the words of Christ, know that these things must surely come.

ມ.ວ.ສ ແລະ ວິບັດແກ່ຄົນທີ່ຈະ ບໍ່ເຊື່ອຟັງພຣະຄຳຂອງພຣະເຢຊູ ແລະ ຂອງ ຄົນທີ່ພຣະອົງໄດ້ເລືອກໄວ້ ແລະ ສົ່ງໄປໃນບັນດາ ພວກເຂົານຳອີກ; ເພາະວ່າຜູ້ໃດກໍຕາມທີ່ບໍ່ຮັບຟັງພຣະຄຳຂອງ ພຣະເຢຊູ ແລະ ຖ້ອຍຄຳຂອງຄົນທີ່ພຣະອົງໄດ້ສົ່ງໄປ, ຜູ້ນັ້ນກໍບໍ່ ໄດ້ຮັບເອົາພຣະອົງ; ແລະ ສະນັ້ນພຣະອົງກໍຈະບໍ່ຮັບເອົາພວກ ເຂົາໃນວັນສຸດທ້າຍ;

And wo be unto him that will not hearken unto the words of Jesus, and also to them whom he hath chosen and sent among them; for whoso receiveth not the words of Jesus and the words of those whom he hath sent receiveth not him; and therefore he will not receive them at the last day;

ມ.ວ.ຫ ແລະ ມັນຈະເປັນການດີກວ່າສຳລັບເຂົາຖ້າຫາກເຂົາບໍ່ໄດ້ ເກີດມາ. ເພາະທ່ານຄິດບໍວ່າ ທ່ານຈະກຳຈັດຄວາມຍຸດຕິທຳ ຂອງພຣະເຈົ້າຜູ້ເຄືອງແຄ້ນໄດ້, ຜູ້ຖືກ ຢຽບຍ່ຳຢູ່ໃຕ້ຕີນຂອງ ມະນຸດ, ເພື່ອໂດຍການນັ້ນຄວາມລອດຈະມາໄດ້?

And it would be better for them if they had not been born. For do ye suppose that ye can get rid of the justice of an offended God, who hath been trampled under feet of men, that thereby salvation might come?

ມ.ວ.ຫ ແລະ ບັດນີ້ຈົ່ງເບິ່ງ, ດັ່ງທີ່ຂ້າພະເຈົ້າໄດ້ເວົ້າກ່ຽວກັບຄົນ ເທລ່ຳນັ້ນຜູ້ທີ່ພຣະຜູ້ເປັນເຈົ້າໄດ້ເລືອກໄວ້, ແທ້ຈິງແລ້ວ, ແມ່ນ ກ່ຽວກັບສາມຄົນທີ່ຖືກພາຂຶ້ນໄປໃນຟ້າສະຫວັນ, ຄືຂ້າພະເຈົ້າ ບໍ່ຮູ້ວ່າ ພວກເພີ່ນໄດ້ຖືກຊຳລະຈາກຄວາມເປັນມະຕະໄປຫາ ຄວາມເປັນອະມະຕະແລ້ວຫລືບໍ່—

And now behold, as I spake concerning those whom the Lord hath chosen, yea, even three who were caught up into the heavens, that I knew not whether they were cleansed from mortality to immortality—

ມ້ກ ແຕ່ຈົ່ງເບິ່ງ, ນັບຕັ້ງແຕ່ຂ້າພະເຈົ້າຂຽນມາ, ຂ້າພະເຈົ້າໄດ້ທູນ ຖາມພຣະຜູ້ເປັນເຈົ້າ, ແລະ ພຣະອົງໄດ້ສະແດງໃຫ້ຂ້າພະເຈົ້າ ປະຈັກว່າ ມັນຈຳເປັນທີ່ຈະຕ້ອງມີການປ່ຽນແປງເກີດຂຶ້ນກັບ ຮ່າງກາຍຂອງພວກເພິ່ນ, ຖ້າບໍ່ດັ່ງນັ້ນພວກເພິ່ນຈະຕ້ອງໄດ້ ຊີມລົດຊາດຂອງຄວາມຕາຍ;

ມ້ຂ ສະນັ້ນ, ເພື່ອພວກເພິ່ນຈະບໍ່ໄດ້ຊີມລົດຊາດຂອງຄວາມຕາຍ, ມັນຈຶ່ງມີການ ປ່ຽນແປງເກີດຂຶ້ນກັບຮ່າງກາຍຂອງພວກເພິ່ນ, ເພື່ອພວກເພິ່ນຈະບໍ່ໄດ້ຮັບຄວາມເຈັບປວດ ຫລື ຄວາມເສົ້າ ສະຫລົດໃຈນອກຈາກເປັນເພາະບາບຂອງໂລກ.

ມ້ຄ ບັດນີ້ການປ່ຽນແປງນີ້ຍັງບໍ່ເທົ່າກັບການປ່ຽນແປງທີ່ຈະ ເກີດຂຶ້ນໃນວັນສຸດທ້າຍ; ແຕ່ມັນມີການປ່ຽນແປງເກີດຂຶ້ນກັບ ພວກເພິ່ນ, ເຖິງຂະໜາດທີ່ຊາຕານບໍ່ມີອຳນາດເໜືອພວກ ເພິ່ນ, ຄືມັນຈະບໍ່ສາມາດ ລໍ້ລວງພວກເພິ່ນໄດ້; ແລະ ພວກເພິ່ນ ໄດ້ຮັບ ການຊຳລະໃຫ້ບໍລິສຸດແລ້ວໃນເນື້ອໜັງ, ຈົນວ່າພວກ ເພິ່ນເປັນຜູ້ ບໍລິສຸດ ແລະ ຈົນວ່າອຳນາດຂອງແຜ່ນດິນໂລກບໍ່ ສາມາດຍຶດພວກເພິ່ນໄວ້ໄດ້.

ຄ0 ແລະ ພວກເພິ່ນຈະຄົງຢູ່ໃນສະພາບເຊັ່ນນີ້ຈົນເຖິງມື້ ພິພາກສາຂອງພຣະຄຣິດ; ແລະ ໃນມື້ນັ້ນພວກເພິ່ນຈະໄດ້ຮັບ ການປ່ຽນແປງອັນຍິ່ງໃຫຍ່ກວ່ານີ້, ແລະ ຈະຖືກຮັບເຂົ້າໄປໃນ ອານາຈັກຂອງພຣະບິດາ ເພື່ອຈະບໍ່ໄດ້ອອກໄປອີກ, ແຕ່ຈະຢູ່ກັບ ພຣະເຈົ້າໃນຟ້າສະຫວັນຊົ່ວນິລັນດອນ.

But behold, since I wrote, I have inquired of the Lord, and he hath made it manifest unto me that there must needs be a change wrought upon their bodies, or else it needs be that they must taste of death;

Therefore, that they might not taste of death there was a change wrought upon their bodies, that they might not suffer pain nor sorrow save it were for the sins of the world.

Now this change was not equal to that which shall take place at the last day; but there was a change wrought upon them, insomuch that Satan could have no power over them, that he could not tempt them; and they were sanctified in the flesh, that they were holy, and that the powers of the earth could not hold them.

And in this state they were to remain until the judgment day of Christ; and at that day they were to receive a greater change, and to be received into the kingdom of the Father to go no more out, but to dwell with God eternally in the heavens.

ນີ ນີໄຟ ๘ฉ

๑ ແລະ ບັດນີ້ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບທ່ານວ່າ ເມື່ອພຣະຜູ້ເປັນເຈົ້າເຫັນສົມຄວນໃນຄວາມສະຫລຽວສະຫລາດຂອງພຣະອົງ, ວ່າຂໍ້ຄວາມເຫລົ່ານີ້ຈະ ມາສູ່ຄົນຕ່າງຊາດ, ຕາມພຣະຄຳຂອງພຣະອົງ ເມື່ອນັ້ນທ່ານຈະຮູ້ວ່າ ພັນທະສັນຍາຊຶ່ງພຣະບິດາໄດ້ເຮັດໄວ້ກັບລູກຫລານອິດສະຣາເອນກ່ຽວກັບການກັບຄືນມາຫາແຜ່ນດິນຊຶ່ງເປັນມູນມໍລະດົກຂອງພວກເຂົານັ້ນ ເລີ່ມຈະສຳເລັດແລ້ວ.

๒ ແລະ ທ່ານຈະຮູ້ວ່າ ພຣະຄຳຂອງພຣະຜູ້ເປັນເຈົ້າຊຶ່ງສາດສະດາຜູ້ບໍລິສຸດເວົ້າໄວ້ຈະສຳເລັດທັງໝົດ; ແລະ ທ່ານບໍ່ຄວນເວົ້າວ່າພຣະຜູ້ເປັນເຈົ້າ ຊັກຊ້າໃນການສະເດັດມາຫາລູກຫລານອິດສະຣາເອນ.

๓ ແລະ ທ່ານບໍ່ຄວນຄິດຢູ່ໃນໃຈວ່າ ຄຳທີ່ເວົ້າໄວ້ນັ້ນບໍ່ມີປະໂຫຍດ, ເພາະຈົ່ງເບິ່ງ, ພຣະຜູ້ເປັນເຈົ້າຈື່ຈຳພັນທະສັນຍາຊຶ່ງພຣະອົງໄດ້ເຮັດໄວ້ກັບຜູ້ຄົນຂອງພຣະອົງຜູ້ເປັນເຊື້ອສາຍອິດສະຣາເອນ.

๔ ແລະ ເມື່ອທ່ານເຫັນຂໍ້ຄວາມເຫລົ່ານີ້ອອກມາໃນບັນດາພວກທ່ານ, ເມື່ອນັ້ນທ່ານບໍ່ຄວນໝິ່ນປະໝາດການກະທຳຂອງພຣະຜູ້ເປັນເຈົ້າອີກຕໍ່ໄປ, ເພາະວ່າ ດາບແຫ່ງ ຄວາມຍຸດຕິທຳຂອງພຣະອົງຢູ່ໃນພຣະຫັດເບື້ອງຂວາຂອງພຣະອົງ; ແລະ ຈົ່ງເບິ່ງ, ໃນມື້ນັ້ນ ຖ້າຫາກວ່າທ່ານໝິ່ນປະໝາດການກະທຳຂອງພຣະອົງແລ້ວ ພຣະອົງຈະເຮັດໃຫ້ມັນຕາມມາທັນທ່ານຢ່າງວ່ອງໄວ.

๕ ວິບັດແກ່ຄົນທີ່ ໝິ່ນປະໝາດການກະທຳຂອງພຣະຜູ້ເປັນເຈົ້າ; ແທ້ຈິງແລ້ວ, ວິບັດແກ່ຄົນທີ່ ປະຕິເສດພຣະຄຣິດ ແລະ ວຽກງານຂອງພຣະອົງ!

๖ ແທ້ຈິງແລ້ວ, ວິບັດແກ່ຄົນທີ່ປະຕິເສດການເປີດເຜີຍຂອງພຣະຜູ້ເປັນເຈົ້າ, ແລະ ເວົ້າວ່າພຣະຜູ້ເປັນເຈົ້າບໍ່ກະທຳວຽກງານໂດຍການເປີດເຜີຍ, ຫລື ໂດຍການທຳນາຍ, ຫລື ໂດຍຂອງປະທານ, ຫລື ໂດຍພາສາ, ຫລື ໂດຍການປິ່ນປົວ, ຫລື ໂດຍອຳນາດຂອງພຣະວິນຍານບໍລິສຸດຕໍ່ໄປອີກແລ້ວ!

๗ ແທ້ຈິງແລ້ວ, ແລະ ວິບັດແກ່ຜູ້ທີ່ຈະເວົ້າສິ່ງນີ້ອອກມາໃນມື້ນັ້ນເພື່ອຫາ ຜົນປະໂຫຍດ, ວ່າມັນ ບໍ່ມີສິ່ງມະຫັດສະຈັນເກີດຂຶ້ນໂດຍພຣະເຢຊູຄຣິດ; ເພາະຄົນທີ່ທຳການນີ້ຈະເປັນດັ່ງບຸດແຫ່ງຄວາມຈິບຫາຍ, ຊຶ່ງຄົນເຊັ່ນນີ້ຈະບໍ່ໄດ້ຮັບຄວາມເມດຕາເລີຍຕາມພຣະຄຳຂອງພຣະຄຣິດທີ່ໃຫ້ໄວ້!

3 Nephi 29

And now behold, I say unto you that when the Lord shall see fit, in his wisdom, that these sayings shall come unto the Gentiles according to his word, then ye may know that the covenant which the Father hath made with the children of Israel, concerning their restoration to the lands of their inheritance, is already beginning to be fulfilled.

And ye may know that the words of the Lord, which have been spoken by the holy prophets, shall all be fulfilled; and ye need not say that the Lord delays his coming unto the children of Israel.

And ye need not imagine in your hearts that the words which have been spoken are vain, for behold, the Lord will remember his covenant which he hath made unto his people of the house of Israel.

And when ye shall see these sayings coming forth among you, then ye need not any longer spurn at the doings of the Lord, for the sword of his justice is in his right hand; and behold, at that day, if ye shall spurn at his doings he will cause that it shall soon overtake you.

Wo unto him that spurneth at the doings of the Lord; yea, wo unto him that shall deny the Christ and his works!

Yea, wo unto him that shall deny the revelations of the Lord, and that shall say the Lord no longer worketh by revelation, or by prophecy, or by gifts, or by tongues, or by healings, or by the power of the Holy Ghost!

Yea, and wo unto him that shall say at that day, to get gain, that there can be no miracle wrought by Jesus Christ; for he that doeth this shall become like unto the son of perdition, for whom there was no mercy, according to the word of Christ!

ຊ ແທ້ຈິງແລ້ວ, ແລະ ທ່ານບໍ່ຄວນ ດູຖູກ ຫລື ໝິ່ນປະໝາດ, ຫລື ເຍາະເຍີ້ຍ ຊາວຢິວ, ຫລື ຄົນໃດຜູ້ທີ່ເຫລືອຢູ່ຂອງເຊື້ອສາຍ ອິດສະຣາເອນອີກຕໍ່ໄປ; ເພາະຈົ່ງເບິ່ງ, ພຣະຜູ້ເປັນເຈົ້າຈື່ຈຳ ພັນທະສັນຍາຂອງພຣະອົງທີ່ໃຫ້ໄວ້ກັບພວກເຂົາ, ແລະ ພຣະອົງຈະກະທຳຕໍ່ພວກເຂົາຕາມທີ່ພຣະອົງໄດ້ສາບານໄວ້.

ຍ ສະນັ້ນ ທ່ານບໍ່ຕ້ອງຄິດວ່າ ທ່ານຈະສາມາດຫັນພຣະຫັດ ເບື້ອງຂວາຂອງພຣະຜູ້ເປັນເຈົ້າໄປທາງຊ້າຍໄດ້, ເພື່ອວ່າ ພຣະອົງຈະບໍ່ດຳເນີນການພິພາກສາ ຈົນເຖິງການເຮັດໃຫ້ ພັນທະສັນຍາຊຶ່ງພຣະອົງໄດ້ເຮັດໄວ້ກັບເຊື້ອສາຍອິດສະຣາເອນ ສຳເລັດ.

Yea, and ye need not any longer hiss, nor spurn, nor make game of the Jews, nor any of the remnant of the house of Israel; for behold, the Lord remembereth his covenant unto them, and he will do unto them according to that which he hath sworn.

Therefore ye need not suppose that ye can turn the right hand of the Lord unto the left, that he may not execute judgment unto the fulfilling of the covenant which he hath made unto the house of Israel.

ນິ ນີໄຟ ນ0

ບ ຈົ່ງເຊື່ອຟັງ, ໂອ້ ຄົນຕ່າງຊາດ, ແລະ ຈົ່ງຟັງພຣະຄຳຂອງ
ພຣະເຢຊູຄຣິດ, ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່, ຊຶ່ງ
ພຣະອົງໄດ້ ບັນຊາໃຫ້ຂ້າພະເຈົ້າກ່າວກ່ຽວກັບທ່ານ, ເພາະຈົ່ງ
ເບິ່ງ, ພຣະອົງໄດ້ບັນຊາຂ້າພະເຈົ້າໃຫ້ຂຽນໄວ້, ມີຄວາມວ່າ:

ຄ ຈົ່ງຫັນມາ, ເຈົ້າ ຄົນຕ່າງຊາດທັງປວງ, ຈາກທາງອັນຊົ່ວຮ້າຍ
ຂອງເຈົ້າ; ແລະ ກັບໃຈຈາກການເຮັດຊົ່ວຂອງເຈົ້າ, ຈາກການເວົ້າ
ຕົວະ ແລະ ການຫລອກລວງຂອງເຈົ້າ, ແລະ ຈາກການໂສເພນີ
ຂອງເຈົ້າ, ແລະ ຈາກຄວາມໜ້າກຽດຊັງອັນລີ້ລັບຂອງເຈົ້າ, ແລະ
ການຂາບໄຫວ້ຮູບບູຊາຂອງເຈົ້າ, ແລະ ການຄາດຕະກຳຂອງ
ເຈົ້າ, ແລະ ການຫລອກລວງຂອງປະໂລຫິດຂອງເຈົ້າ, ແລະ
ການອິດສາບັງບຽດຂອງເຈົ້າ, ແລະ ການຜິດຖຽງກັນຂອງເຈົ້າ,
ແລະ ຈາກຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງທັງໝົດຂອງ
ເຈົ້າ, ແລະ ມາຫາເຮົາ ແລະ ຮັບບັບຕິສະມາໃນນາມຂອງເຮົາ,
ເພື່ອເຈົ້າຈະໄດ້ຮັບການປົດບາບຂອງເຈົ້າ, ແລະ ເພື່ອຈະໄດ້ເຕັມ
ໄປດ້ວຍພຣະວິນຍານບໍລິສຸດ, ເພື່ອເຈົ້າຈະຖືກ ນັບເຂົ້າຢູ່ກັບ
ຜູ້ຄົນຂອງເຮົາ ຜູ້ເປັນເຊື້ອສາຍອິດສະຣາເອນ.

3 Nephi 30

Hearken, O ye Gentiles, and hear the words of Jesus Christ, the Son of the living God, which he hath commanded me that I should speak concerning you, for, behold he commandeth me that I should write, saying:

Turn, all ye Gentiles, from your wicked ways; and repent of your evil doings, of your lyings and deceivings, and of your whoredoms, and of your secret abominations, and your idolatries, and of your murders, and your priestcrafts, and your envyings, and your strifes, and from all your wickedness and abominations, and come unto me, and be baptized in my name, that ye may receive a remission of your sins, and be filled with the Holy Ghost, that ye may be numbered with my people who are of the house of Israel.

ນີໄຟສະບັບທີສີ່

ໜັງສືນີໄຟ

ຜູ້ເປັນລູກຊາຍຂອງນີໄຟ—ຊຶ່ງເປັນສານຸສິດຜູ້ໜຶ່ງຂອງພຣະເຢຊູຄຣິດ

ເລື່ອງລາວຂອງຜູ້ຄົນຂອງນີໄຟຕາມບັນທຶກຂອງເພິ່ນ.

Fourth Nephi

The Book of Nephi

Who Is the Son of Nephi—One of the Disciples of Jesus Christ

An account of the people of Nephi, according to his record.

ᥣ ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີສາມສິບສີ່ຜ່ານໄປ, ແລະ ປີທີສາມສິບຫ້ານຳອີກ, ແລະ ຈົ່ງເບິ່ງ ສານຸສິດຂອງພຣະເຢຊູໄດ້ຈັດຕັ້ງສາດສະໜາຈັກຂອງພຣະຄຣິດຂຶ້ນໃນແຜ່ນດິນທັງໝົດໂດຍຮອບ. ແລະ ຫລາຍຕໍ່ຫລາຍຄົນໄດ້ມາຫາພວກເພິ່ນ, ແລະ ໄດ້ກັບໃຈຈາກບາບຂອງຕົນຢ່າງແທ້ຈິງ, ໄດ້ຮັບບັບຕິສະມາໃນພຣະນາມຂອງພຣະເຢຊູ; ແລະ ພວກເຂົາໄດ້ຮັບພຣະວິນຍານບໍລິສຸດນຳອີກ.

And it came to pass that the thirty and fourth year passed away, and also the thirty and fifth, and behold the disciples of Jesus had formed a church of Christ in all the lands round about. And as many as did come unto them, and did truly repent of their sins, were baptized in the name of Jesus; and they did also receive the Holy Ghost.

᥇ ແລະ ເຫດການໄດ້ບັງເກີດຂຶ້ນໃນປີທີສາມສິບຫົກຄື, ຜູ້ຄົນທັງໝົດທົ່ວໜ້າແຜ່ນດິນໄດ້ປ່ຽນໃຈເຫລື້ອມໃສໃນພຣະຜູ້ເປັນເຈົ້າ, ທັງຊາວນີໄຟ ແລະ ຊາວເລມັນ, ແລະ ບໍ່ມີການຂັດແຍ້ງ ແລະ ການໂຕ້ຖຽງກັນໃນບັນດາພວກເຂົາ, ແລະ ທຸກຄົນກໍໄດ້ປະຕິບັດຕໍ່ກັນໂດຍທ່ຽງທຳ.

And it came to pass in the thirty and sixth year, the people were all converted unto the Lord, upon all the face of the land, both Nephites and Lamanites, and there were no contentions and disputations among them, and every man did deal justly one with another.

᥈ ແລະ ພວກເຂົາມີເຂົ້າຂອງ ທັງໝົດນຳກັນເປັນສ່ວນລວມ; ສະນັ້ນ ຈຶ່ງບໍ່ມີຄົນຮັ່ງມີ ຫລື ຄົນຍາກຈົນ, ຂ້າທາດ ຫລື ຜູ້ເປັນອິດສະລະ, ແຕ່ພວກເຂົາທຸກຄົນເປັນອິດສະລະ, ແລະ ເປັນຜູ້ມີສ່ວນໃນຂອງປະທານຈາກສະຫວັນ.

And they had all things common among them; therefore there were not rich and poor, bond and free, but they were all made free, and partakers of the heavenly gift.

᥉ ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີສາມສິບເຈັດກໍໄດ້ຜ່ານໄປອີກ, ແລະ ມັນກໍຍັງມີສັນຕິສຸກຢູ່ຕໍ່ໄປໃນແຜ່ນດິນ.

And it came to pass that the thirty and seventh year passed away also, and there still continued to be peace in the land.

᥊ ແລະ ມີວຽກງານອັນຍິ່ງໃຫຍ່ ແລະ ໜ້າອັດສະຈັນ ທີ່ສານຸສິດຂອງພຣະເຢຊູເຮັດຂຶ້ນ, ເຖິງຂະໜາດທີ່ພວກເພິ່ນໄດ້ປິ່ນປົວຄົນເຈັບປ່ວຍ, ແລະ ເຮັດໃຫ້ຄົນຕາຍຄືນມີຊີວິດອີກ, ແລະ ເຮັດໃຫ້ຄົນເປັຍລ່ອຍຍ່າງໄດ້, ແລະ ຄົນຕາບອດເຫັນຮຸ່ງ, ແລະ ຄົນຫູໜວກໄດ້ຍິນ; ແລະ ພວກເພິ່ນໄດ້ເຮັດສິ່ງມະຫັດສະຈັນນາໆປະການໃນບັນດາລູກຫລານມະນຸດ; ແລະ ພວກເພິ່ນບໍ່ໄດ້ເຮັດສິ່ງມະຫັດສະຈັນໂດຍວິທີອື່ນ ນອກຈາກໃນພຣະນາມຂອງພຣະເຢຊູເທົ່ານັ້ນ.

And there were great and marvelous works wrought by the disciples of Jesus, insomuch that they did heal the sick, and raise the dead, and cause the lame to walk, and the blind to receive their sight, and the deaf to hear; and all manner of miracles did they work among the children of men; and in nothing did they work miracles save it were in the name of Jesus.

ຜ ແລະ ປີທີສາມສິບແປດໄດ້ຜ່ານໄປດັ່ງນີ້, ແລະ ປີທີສາມສິບເກົ້າ ແລະ ປີທີສີ່ສິບເອັດ, ແລະ ປີທີສີ່ສິບສອງນຳອີກ, ແທ້ຈິງແລ້ວ, ຈົນເຖິງປີທີສີ່ສິບເກົ້າຜ່ານໄປ, ແລະ ປີທີຫ້າສິບເອັດອີກ, ແລະ ປີທີຫ້າສິບສອງ; ແທ້ຈິງແລ້ວ, ຈົນປີທີຫ້າສິບເກົ້າຜ່ານໄປນຳອີກ.

And thus did the thirty and eighth year pass away, and also the thirty and ninth, and forty and first, and the forty and second, yea, even until forty and nine years had passed away, and also the fifty and first, and the fifty and second; yea, and even until fifty and nine years had passed away.

ກ ແລະ ພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ພວກເຂົາຈະເລີນຮຸ່ງເຮືອງຢ່າງຍິ່ງໃນແຜ່ນດິນ; ແທ້ຈິງແລ້ວ, ເຖິງຂະໜາດທີ່ພວກເຂົາໄດ້ສ້າງເມືອງຂຶ້ນອີກໃນບ່ອນ ຊຶ່ງເຄີຍເປັນເມືອງທີ່ຖືກເຜົາໄໝ້ໄປແລ້ວ.

And the Lord did prosper them exceedingly in the land; yea, insomuch that they did build cities again where there had been cities burned.

ຂ ແທ້ຈິງແລ້ວ, ເຖິງແມ່ນ ເມືອງເຊຣາເຮັມລາ ຊຶ່ງເປັນເມືອງທີ່ຍິ່ງໃຫຍ່ນັ້ນ ກໍໄດ້ຖືກສ້າງຂຶ້ນໃໝ່ອີກ.

Yea, even that great city Zarahemla did they cause to be built again.

ຄ ແຕ່ວ່າ ມີຫລາຍເມືອງ ຊຶ່ງໄດ້ ຈົມລົງ, ແລະ ນ້ຳເຂົ້າມາແທນທີ່; ສະນັ້ນ ຈຶ່ງສ້າງເມືອງເຫລົ່ານັ້ນຂຶ້ນໃໝ່ບໍ່ໄດ້.

But there were many cities which had been sunk, and waters came up in the stead thereof; therefore these cities could not be renewed.

ງ ແລະ ບັດນີ້, ຈົ່ງເບິ່ງເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນຂອງນີໄຟໄດ້ເຂັ້ມແຂງຂຶ້ນ, ແລະ ມີຄົນເພີ່ມທະວີຂຶ້ນຢ່າງໄວ, ແລະ ກັບເປັນຜູ້ຄົນທີ່ ຈົບງາມ ແລະ ໜ້າຊົມທີ່ສຸດ.

And now, behold, it came to pass that the people of Nephi did wax strong, and did multiply exceedingly fast, and became an exceedingly fair and delightsome people.

ຈ ແລະ ພວກເຂົາໄດ້ແຕ່ງງານກັນ, ແລະ ຍົກໃຫ້ແຕ່ງງານກັນ, ແລະ ໄດ້ຮັບພອນຫລາຍປະການຕາມຄຳສັນຍາ ຊຶ່ງພຣະຜູ້ເປັນເຈົ້າໄດ້ກະທຳໄວ້ກັບພວກເຂົາ.

And they were married, and given in marriage, and were blessed according to the multitude of the promises which the Lord had made unto them.

ສ ແລະ ພວກເຂົາບໍ່ໄດ້ເດີນໄປຕາມ ການປະຕິບັດ ແລະ ພິທີການຂອງ ກົດຂອງໂມເຊອີກຕໍ່ໄປ; ແຕ່ວ່າພວກເຂົາໄດ້ເດີນໄປຕາມພຣະບັນຍັດ ຊຶ່ງພວກເຂົາໄດ້ຮັບຈາກພຣະຜູ້ເປັນເຈົ້າ ອົງເປັນພຣະເຈົ້າຂອງພວກເຂົາ, ໂດຍ ການຖືສິນອົດເຂົ້າ ແລະ ການອະທິຖານ, ແລະ ການຊຸມນຸມກັນເລື້ອຍໆເພື່ອອະທິຖານ ແລະ ເພື່ອຟັງພຣະຄຳຂອງພຣະຜູ້ເປັນເຈົ້າ.

And they did not walk any more after the performances and ordinances of the law of Moses; but they did walk after the commandments which they had received from their Lord and their God, continuing in fasting and prayer, and in meeting together oft both to pray and to hear the word of the Lord.

ສມ ແລະ ເຫດການໄດ້ບັງເກີດຂຶ້ນຄື ບໍ່ມີການຂັດແຍ້ງກັນໃນບັນດາຜູ້ຄົນທັງໝົດໃນທົ່ວແຜ່ນດິນ, ແຕ່ມີສິ່ງມະຫັດສະຈັນອັນຍິ່ງໃຫຍ່ຕ່າງໆທີ່ເຮັດຂຶ້ນໃນບັນດາສານຸສິດຂອງພຣະເຢຊູ.

And it came to pass that there was no contention among all the people, in all the land; but there were mighty miracles wrought among the disciples of Jesus.

ສດ ແລະ ເຫດການໄດ້ບັງເກີດຂຶ້ນຄື ປີທີເຈັດສິບເອັດຜ່ານໄປ ແລະ ປີທີເຈັດສິບສອງອີກ, ແທ້ຈິງແລ້ວ, ແລະ ໂດຍສະຫລຸບ, ຈົນຮອດປີທີເຈັດສິບເກົ້າໄດ້ຜ່ານໄປ; ແທ້ຈິງແລ້ວ ຈົນຮອດໜຶ່ງຮ້ອຍປີຜ່ານໄປ, ແລະ ສານຸສິດຂອງພຣະເຢຊູຜູ້ທີ່ພຣະອົງໄດ້ເລືອກໄວ້ກໍໄດ້ຈາກໄປຫາ ທີ່ສຸຂະເສີມຂອງພຣະເຈົ້າທັງໝົດແລ້ວ ເວັ້ນເສຍແຕ່ ສາມຄົນທີ່ຈະຍັງຄົງຢູ່ຕໍ່ໄປ; ແລະ ມີ ສານຸສິດຜູ້ອື່ນໆໄດ້ຮັບ ແຕ່ງຕັ້ງແທນ; ແລະ ຜູ້ຄົນເປັນຈຳນວນຫລວງຫລາຍໃນລຸ້ນນັ້ນກໍໄດ້ຈາກໄປເໝືອນກັນ.

And it came to pass that the seventy and first year passed away, and also the seventy and second year, yea, and in fine, till the seventy and ninth year had passed away; yea, even an hundred years had passed away, and the disciples of Jesus, whom he had chosen, had all gone to the paradise of God, save it were the three who should tarry; and there were other disciples ordained in their stead; and also many of that generation had passed away.

๑๕	ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນ ບໍ່ມີການຂັດແຍ້ງກັນໃນແຜ່ນດິນ, ຍ້ອນວ່າຄວາມຮັກຂອງພຣະເຈົ້າ ຊຶ່ງມີຢູ່ໃນໃຈຂອງຜູ້ຄົນ.	And it came to pass that there was no contention in the land, because of the love of God which did dwell in the hearts of the people.
๑๖	ແລະ ມັນ ບໍ່ມີການອິດສາບັງບຽດ, ບໍ່ມີການຜິດຖຽງກັນ, ບໍ່ມີການວຸ້ນວາຍ, ບໍ່ມີການໂສເພນີ, ບໍ່ມີການເວົ້າຕົວະ, ບໍ່ມີການຄາດຕະກຳ, ບໍ່ມີກິເລດຕັນຫາຢ່າງໃດເລີຍ; ແລະ ໂດຍແນ່ນອນແລ້ວ ຄົງບໍ່ມີຜູ້ຄົນກຸ່ມໃດທີ່ມີ ຄວາມສຸກຫລາຍໄປກວ່ານີ້ໃນບັນດາຜູ້ຄົນທັງປວງທີ່ພຣະຫັດຂອງພຣະເຈົ້າໄດ້ສ້າງຂຶ້ນມາ.	And there were no envyings, nor strifes, nor tumults, nor whoredoms, nor lyings, nor murders, nor any manner of lasciviousness; and surely there could not be a happier people among all the people who had been created by the hand of God.
๑๗	ມັນບໍ່ມີໂຈນ, ຫລື ຄາດຕະກອນ, ທັງບໍ່ມີຊາວເລມັນ ຫລື ຊາວໃດໆເລີຍ; ແຕ່ຄົນທັງໝົດຢູ່ເປັນ ພວກດຽວກັນ, ເປັນລູກຂອງພຣະຄຣິດ, ແລະ ທາຍາດຂອງອານາຈັກຂອງພຣະເຈົ້າ.	There were no robbers, nor murderers, neither were there Lamanites, nor any manner of -ites; but they were in one, the children of Christ, and heirs to the kingdom of God.
๑๘	ແລະ ພວກເຂົາໄດ້ເປັນສຸກຫລາຍແທ້ໆ! ເພາະພຣະຜູ້ເປັນເຈົ້າໄດ້ປະທານພອນໃຫ້ພວກເຂົາສຳລັບການກະທຳຂອງພວກເຂົາທັງໝົດ; ແທ້ຈິງແລ້ວ, ພວກເຂົາໄດ້ຮັບພອນ ແລະ ຈະເລີນຮຸ່ງເຮືອງຢູ່ເຖິງແມ່ນໜຶ່ງຮ້ອຍສິບປີຜ່ານໄປ; ແລະ ຄົນລຸ້ນທຳອິດນັບແຕ່ພຣະຄຣິດກໍໄດ້ຈາກໄປ, ແລະ ມັນກໍບໍ່ໄດ້ມີການຂັດແຍ້ງກັນໃນທົ່ວແຜ່ນດິນເລີຍ.	And how blessed were they! For the Lord did bless them in all their doings; yea, even they were blessed and prospered until an hundred and ten years had passed away; and the first generation from Christ had passed away, and there was no contention in all the land.
๑๙	ແລະ ເຫດການໄດ້ບັງເກີດຂຶ້ນຄືນີໄຟ, ຜູ້ທີ່ເຮັດບັນທຶກອັນສຸດທ້າຍນີ້ໄດ້ສິ້ນຊີວິດໄປ, (ຊຶ່ງເພິ່ນໄດ້ເຮັດບັນທຶກໄວ້ໃນ ແຜ່ນຈາລຶກຂອງນີໄຟ) ແລະ ອາໂມລູກຊາຍຂອງເພິ່ນໄດ້ເຮັດບັນທຶກນີ້ແທນ; ແລະ ລາວກໍໄດ້ເຮັດບັນທຶກໄວ້ໃນແຜ່ນຈາລຶກຂອງນີໄຟນຳອີກ.	And it came to pass that Nephi, he that kept this last record, (and he kept it upon the plates of Nephi) died, and his son Amos kept it in his stead; and he kept it upon the plates of Nephi also.
๘๐	ແລະ ລາວໄດ້ຮັກສາບັນທຶກຢູ່ແປດສິບສີ່ປີ, ແລະ ສັນຕິສຸກກໍຍັງມີຢູ່ໃນແຜ່ນດິນ, ນອກຈາກຜູ້ຄົນສ່ວນໜ້ອຍໜຶ່ງທີ່ອອກໄປຈາກສາດສະໜາຈັກ ແລະ ເອີ້ນຊື່ຕົນວ່າ ຊາວເລມັນ; ສະນັ້ນ ມັນຈຶ່ງເລີ່ມມີຊາວເລມັນຢູ່ໃນແຜ່ນດິນອີກ.	And he kept it eighty and four years, and there was still peace in the land, save it were a small part of the people who had revolted from the church and taken upon them the name of Lamanites; therefore there began to be Lamanites again in the land.
๘๑	ແລະ ເຫດການໄດ້ບັງເກີດຂຶ້ນຄື ອາໂມໄດ້ສິ້ນຊີວິດໄປຄືກັນ, (ແລະ ມັນເປັນໜຶ່ງຮ້ອຍເກົ້າສິບສີ່ປີນັບແຕ່ການສະເດັດມາ ຂອງພຣະຄຣິດ) ແລະ ອາໂມລູກຊາຍຂອງລາວໄດ້ຮັກສາ ບັນທຶກແທນ; ແລະ ລາວກໍໄດ້ບັນທຶກໄວ້ໃນແຜ່ນຈາລຶກຂອງນີ ໄຟຄືກັນ; ແລະ ມັນມີຂຽນໄວ້ໃນໜັງສືນີໄຟນຳອີກ ຊຶ່ງແມ່ນ ໜັງສືເຫລັ້ມນີ້.	And it came to pass that Amos died also, (and it was an hundred and ninety and four years from the coming of Christ) and his son Amos kept the record in his stead; and he also kept it upon the plates of Nephi; and it was also written in the book of Nephi, which is this book.
๘๘	ແລະ ເຫດການໄດ້ບັງເກີດຂຶ້ນຄື ສອງຮ້ອຍປີໄດ້ຜ່ານໄປ; ແລະ ຄົນລຸ້ນທີສອງໄດ້ຜ່ານໄປໝົດ ນອກຈາກບໍ່ເທົ່າໃດຄົນເທົ່ານັ້ນ.	And it came to pass that two hundred years had passed away; and the second generation had all passed away save it were a few.

ຄ.ມ ແລະ ບັດນີ້ຂ້າພະເຈົ້າມໍມອນຢາກໃຫ້ທ່ານຮູ້ວ່າ ຜູ້ຄົນໄດ້ເພີ່ມທະວີຂຶ້ນ, ເຖິງຂະໜາດທີ່ພວກເຂົາໄດ້ແຜ່ຂະຫຍາຍໄປທົ່ວໜ້າແຜ່ນດິນ, ແລະ ວ່າພວກເຂົາກັບເປັນຄົນຮັ່ງມີຢ່າງຍິ່ງ, ເພາະຄວາມຈະເລີນຮຸ່ງເຮືອງຂອງພວກເຂົາໃນພຣະຄຣິດ.

ຄ.ຫ ແລະ ບັດນີ້, ໃນປີທີສອງຮ້ອຍໜຶ່ງໄດ້ເລີ່ມມີບາງຄົນໃນບັນດາພວກເຂົາທີ່ລະເມີເພີ້ຝັນດ້ວຍ ຄວາມທະນົງຕົວ ເຊັ່ນ ການນຸ່ງຖືເສື້ອຜ້າທີ່ມີລາຄາແພງ, ແລະ ໃສ່ເຄື່ອງປະດັບຢ່າງດີນາງຊະນິດ ແລະ ໃຊ້ຂອງດີງຂອງໂລກ.

ຄ.ຫ ແລະ ນັບແຕ່ເວລານັ້ນໄປພວກເຂົາບໍ່ໄດ້ມີສິ່ງຂອງ ແລະ ເຂົ້າຂອງຮວມກັນ ເປັນສ່ວນລວມໃນບັນດາພວກເຂົາອີກຕໍ່ໄປ.

ຄ.ຈ ແລະ ພວກເຂົາເລີ່ມແບ່ງຊັ້ນວັນນະກັນ; ແລະ ພວກເຂົາເລີ່ມສ້າງ ສາດສະໜາຈັກຂອງຕົນເອງຂຶ້ນ ເພື່ອຫາ ຜົນປະ�โຫຍດ, ແລະ ເລີ່ມປະຕິເສດສາດສະໜາຈັກທີ່ແທ້ຈິງຂອງພຣະຄຣິດ.

ຄ.ສ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອສອງຮ້ອຍສິບປີຜ່ານໄປ ກໍໄດ້ມີສາດສະໜາຈັກຢູ່ຫລາຍແຫ່ງໃນແຜ່ນດິນ; ແທ້ຈິງແລ້ວ, ມີຫລາຍສາດສະໜາຈັກຊຶ່ງອ້າງວ່າຕົນຮູ້ຈັກພຣະຄຣິດ, ແຕ່ພວກເຂົາໄດ້ ປະຕິເສດພຣະກິດຕິຄຸນສ່ວນໃຫຍ່ຂອງພຣະອົງ, ເຖິງຂະໜາດທີ່ພວກເຂົາໄດ້ຍອມຮັບຄວາມຊົ່ວຮ້າຍນາໆ ປະການ, ແລະ ໄດ້ປະຕິບັດສິ່ງທີ່ສັກສິດແກ່ຄົນທີ່ຖືກ ຫ້າມ ເພາະຄວາມບໍ່ມີຄ່າຄວນ.

ຄ.ຊ ແລະ ສາດສະໜາຈັກແຫ່ງນີ້ໄດ້ມີສະມາຊິກເພີ່ມທະວີຂຶ້ນ ຢ່າງຫລວງຫລາຍຍ້ອນວ່າຄວາມຊົ່ວຮ້າຍ, ແລະ ຍ້ອນວ່າ ອຳນາດຂອງຊາຕານຜູ້ຊຶ່ງມີອຳນາດເໜືອໃຈຂອງພວກເຂົາ.

ຄ.ດ ແລະ ອີກອັນໜຶ່ງ, ມັນມີສາດສະໜາຈັກອີກແຫ່ງໜຶ່ງທີ່ ປະຕິເສດພຣະຄຣິດ; ແລະ ພວກເຂົາໄດ້ ຂົ່ມເຫັງສາດສະໜາ ຈັກທີ່ແທ້ຈິງຂອງພຣະຄຣິດ, ຍ້ອນວ່າຄວາມຖ່ອມຕົວຂອງ ພວກເຂົາ ແລະ ຄວາມເຊື່ອຂອງພວກເຂົາໃນພຣະຄຣິດ; ແລະ ພວກເຂົາໄດ້ໝິ່ນປະໝາດພວກເຂົາຍ້ອນວ່າສິ່ງມະຫັດສະຈັນ ຫລາຍຢ່າງຊຶ່ງກະທຳຂຶ້ນໃນບັນດາພວກເຂົາ.

ມ.ວ ສະນັ້ນ ພວກເຂົາຈຶ່ງໄດ້ໃຊ້ອຳນາດ ແລະ ສິດອຳນາດຂົ່ມຂູ່ ສານຸສິດຂອງພຣະເຢຊູຜູ້ທີ່ຢູ່ກັບພວກເຂົາ, ແລະ ພວກເຂົາໄດ້ ເອົາພວກເພີ່ນເຂົ້າ ຄຸກ; ແຕ່ໂດຍອຳນາດຂອງພຣະຄຳຂອງ ພຣະເຈົ້າຊຶ່ງຢູ່ກັບພວກເພີ່ນ, ຄຸກຈຶ່ງແຍກອອກເປັນສອງ, ແລະ ພວກເພີ່ນກໍໄດ້ອອກໄປເຮັດສິ່ງມະຫັດສະຈັນອັນຍິ່ງໃຫຍ່ໃນ ບັນດາພວກເຂົາ.

ມ.ວ.ນ ເຖິງຢ່າງໃດກໍຕາມ, ແລະ ທັງໆທີ່ສິ່ງມະຫັດສະຈັນທັງໝົດ ນີ້ໄດ້ເກີດຂຶ້ນຢູ່ກໍຕາມ, ແຕ່ຜູ້ຄົນກໍຍັງເຮັດໃຈແຂງກະດ້າງຢູ່, ແລະ ໄດ້ພະຍາຍາມທີ່ຈະຂ້າພວກເພີ່ນເໝືອນດັ່ງຊາວຢິວທີ່ຢູ່ ເຢຣູຊາເລັມພະຍາຍາມຂ້າພຣະເຢຊູຕາມພຣະຄຳຂອງ ພຣະອົງ.

And now I, Mormon, would that ye should know that the people had multiplied, insomuch that they were spread upon all the face of the land, and that they had become exceedingly rich, because of their prosperity in Christ.

And now, in this two hundred and first year there began to be among them those who were lifted up in pride, such as the wearing of costly apparel, and all manner of fine pearls, and of the fine things of the world.

And from that time forth they did have their goods and their substance no more common among them.

And they began to be divided into classes; and they began to build up churches unto themselves to get gain, and began to deny the true church of Christ.

And it came to pass that when two hundred and ten years had passed away there were many churches in the land; yea, there were many churches which professed to know the Christ, and yet they did deny the more parts of his gospel, insomuch that they did receive all manner of wickedness, and did administer that which was sacred unto him to whom it had been forbidden because of unworthiness.

And this church did multiply exceedingly because of iniquity, and because of the power of Satan who did get hold upon their hearts.

And again, there was another church which denied the Christ; and they did persecute the true church of Christ, because of their humility and their belief in Christ; and they did despise them because of the many miracles which were wrought among them.

Therefore they did exercise power and authority over the disciples of Jesus who did tarry with them, and they did cast them into prison; but by the power of the word of God, which was in them, the prisons were rent in twain, and they went forth doing mighty miracles among them.

Nevertheless, and notwithstanding all these miracles, the people did harden their hearts, and did seek to kill them, even as the Jews at Jerusalem sought to kill Jesus, according to his word.

ມ.ດ ແລະ ເຂົາໄດ້ໂຍນພວກເພີ່ນເຂົ້າ ເຕົາ ໄຟ, ແຕ່ພວກເພີ່ນໄດ້ ອອກມາໂດຍບໍ່ໄດ້ຮັບອັນຕະລາຍຢ່າງໃດ.

ມ.ມ ແລະ ເຂົາໄດ້ໂຍນພວກເພີ່ນເຂົ້າໃນ ຖ້ຳສັດຮ້າຍອີກ, ແລະ ພວກເພີ່ນໄດ້ຫລິ້ນຢູ່ກັບສັດຮ້າຍເຫລົ່ານັ້ນຄືກັນກັບເດັກນ້ອຍ ຫລິ້ນຢູ່ນຳລູກແກະ; ແລະ ພວກເພີ່ນໄດ້ອອກມາຈາກສັດເຫລົ່ານັ້ນ ໂດຍບໍ່ໄດ້ຮັບອັນຕະລາຍເລີຍ.

ມ.ຫ ເຖິງຢ່າງໃດກໍຕາມ, ຜູ້ຄົນກໍຍັງເຮັດໃຈແຂງກະດ້າງຢູ່, ເພາະວ່າພວກເຂົາໄດ້ຖືກຊັກນຳໄປໂດຍພວກນັກທຳ ແລະ ໂດຍ ສາດສະດາປອມຫລາຍຄົນ ເພື່ອໃຫ້ສ້າງສາດສະໜາจักหลายบ่อนขึ้น, ແລະ ໃຫ້ເຮັດຄວາມຊົ່ວຮ້າຍນາໆປະການ. ແລະ ພວກເຂົາໄດ້ ທຸບຕີຜູ້ຄົນຂອງພຣະເຢຊູ; ແຕ່ວ່າຜູ້ຄົນຂອງ ພຣະເຢຊູບໍ່ໄດ້ໂຕ້ຕອບເລີຍ. ແລະ ພວກເຂົາໄດ້ເສື່ອມໂຊມ ລົງດັ່ງນັ້ນຢູ່ໃນຄວາມບໍ່ເຊື່ອຖືໄປແຕ່ລະປີ ແລະ ຢູ່ໃນຄວາມ ຊົ່ວຮ້າຍຈົນວ່າສອງຮ້ອຍສາມສິບປີຜ່ານໄປ.

ມ.ຫ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນໃນປີນີ້, ແທ້ຈິງແລ້ວ, ໃນ ປີສອງຮ້ອຍສາມສິບເອັດ, ມັນເກີດມີການແບ່ງແຍກກັນຢ່າງ ໃຫຍ່ຫລວງໃນບັນດາຜູ້ຄົນ.

ມ.ຫ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີນີ້ ມັນໄດ້ເກີດມີຜູ້ຄົນ ກຸ່ມໜຶ່ງ ຊຶ່ງມີຊື່ວ່າ ຊາວນີໄຟ, ແລະ ພວກເຂົາເປັນຜູ້ທີ່ມີຄວາມ ເຊື່ອຢ່າງແທ້ຈິງໃນພຣະຄຣິດ; ແລະ ໃນບັນດາພວກເຂົາມີພວກ ອື່ນອີກທີ່ຊາວເລມັນເອີ້ນว่า—ຊາວຢາໂຄບ, ຊາວໂຢເຊັບ, ແລະ ຊາວໂຊຣຳ;

ມ.ສ ສະນັ້ນ ຜູ້ທີ່ເຊື່ອໃນພຣະຄຣິດຢ່າງແທ້ຈິງ, ແລະ ຜູ້ ນະມັດສະການຢ່າງແທ້ຈິງຂອງພຣະຄຣິດ, (ລວມທັງ ສານຸສິດ ສາມຄົນຂອງພຣະເຢຊູ ຊຶ່ງຈະຄົງຢູ່ຕໍ່ໄປ) ຖືກເອີ້ນว่า ຊາວນີ ໄຟ, ແລະ ຊາວຢາໂຄບ, ແລະ ຊາວໂຢເຊັບ, ແລະ ຊາວໂຊຣຳ.

ມ.ຫ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ທີ່ປະຕິເສດພຣະກິດຕິຄຸນ ຖືກເອີ້ນว่า ຊາວເລມັນ, ຊາວເລມູເອນ, ແລະ ຊາວ ອິດຊະມາເອນ; ແລະ ພວກເຂົາບໍ່ໄດ້ເສື່ອມໂຊມຢູ່ໃນຄວາມບໍ່ ເຊື່ອຖື, ແຕ່ພວກເຂົາໄດ້ ກະບົດຕໍ່ພຣະກິດຕິຄຸນຂອງພຣະຄຣິດ ໂດຍເຈດຕະນາ; ແລະ ພວກເຂົາໄດ້ສິດສອນລູກຫລານຂອງ ພວກເຂົາບໍ່ໃຫ້ເຊື່ອ, ເໝືອນດັ່ງທີ່ບັນພະບຸລຸດຂອງພວກເຂົາ, ທີ່ບໍ່ໄດ້ເຊື່ອຕັ້ງແຕ່ຕົ້ນມາ.

ມ.ຫ ແລະ ເປັນຍ້ອນຄວາມຊົ່ວຮ້າຍ ແລະ ຄວາມໜ້າກຽດຊັງຂອງ ບັນພະບຸລຸດຂອງພວກເຂົາຄືກັນກັບທີ່ເປັນມາແລ້ວນັບຕັ້ງແຕ່ ຕົ້ນມາ. ແລະ ພວກເຂົາຈົ່ງຖືກ ສິດສອນໃຫ້ກຽດຊັງລູກຂອງ ພຣະເຈົ້າ, ຄືກັນກັບຊາວເລມັນຖືກສິດສອນໃຫ້ກຽດຊັງລູກ ຫລານຊາວນີໄຟນັບຕັ້ງແຕ່ຕົ້ນມາ.

And they did cast them into furnaces of fire, and they came forth receiving no harm.

And they also cast them into dens of wild beasts, and they did play with the wild beasts even as a child with a lamb; and they did come forth from among them, receiving no harm.

Nevertheless, the people did harden their hearts, for they were led by many priests and false prophets to build up many churches, and to do all manner of iniquity. And they did smite upon the people of Jesus; but the people of Jesus did not smite again. And thus they did dwindle in unbelief and wickedness, from year to year, even until two hundred and thirty years had passed away.

And now it came to pass in this year, yea, in the two hundred and thirty and first year, there was a great division among the people.

And it came to pass that in this year there arose a people who were called the Nephites, and they were true believers in Christ; and among them there were those who were called by the Lamanites—Jacobites, and Josephites, and Zoramites;

Therefore the true believers in Christ, and the true worshipers of Christ, (among whom were the three disciples of Jesus who should tarry) were called Nephites, and Jacobites, and Josephites, and Zoramites.

And it came to pass that they who rejected the gospel were called Lamanites, and Lemuelites, and Ishmaelites; and they did not dwindle in unbelief, but they did wilfully rebel against the gospel of Christ; and they did teach their children that they should not believe, even as their fathers, from the beginning, did dwindle.

And it was because of the wickedness and abomination of their fathers, even as it was in the beginning. And they were taught to hate the children of God, even as the Lamanites were taught to hate the children of Nephi from the beginning.

๔๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ສອງຮ້ອຍສີ່ສິບສີ່ປີຜ່ານໄປ ແລະ ການງານຂອງຜູ້ຄົນເປັນໄປດັ່ງນັ້ນ. ແລະ ຜູ້ຄົນສ່ວນທີ່ຊົ່ວຫລາຍກວ່າກໍເຂັ້ມແຂງຂຶ້ນ, ແລະ ກັບມີຈຳນວນຫລາຍກວ່າ ຜູ້ຄົນຂອງພຣະເຈົ້າ.

And it came to pass that two hundred and forty and four years had passed away, and thus were the affairs of the people. And the more wicked part of the people did wax strong, and became exceedingly more numerous than were the people of God.

๔๑ ແລະ ພວກເຂົາຍັງຄົງສ້າງສາດສະໜາจักใช้ตนเองอยู่ต່ໄປ, ແລະ ຕົກແຕ່ງມັນດ້ວຍຂອງມີຄ່ານາໆຊະນິດ. ແລະ ສອງຮ້ອຍ ຫ້າສິບປີໄດ້ຜ່ານໄປດັ່ງນີ້, ແລະ ສອງຮ້ອຍຫົກສິບປີກໍຜ່ານໄປ ອີກ.

And they did still continue to build up churches unto themselves, and adorn them with all manner of precious things. And thus did two hundred and fifty years pass away, and also two hundred and sixty years.

๔๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນກຸ່ມທີ່ຊົ່ວເລີ່ມເຮັດຄຳ ສາບານ ແລະ ເຮັດ ການມົ້ວສຸມລັບຂອງແກດີອານທັນຂຶ້ນອີກ.

And it came to pass that the wicked part of the people began again to build up the secret oaths and combinations of Gadianton.

๔๓ ແລະ ຜູ້ຄົນຜູ້ມີຊື່ວ່າ ຜູ້ຄົນຂອງນີໄຟເລີ່ມອວດດີໃນໃຈ, ຍ້ອນ ວ່າຂອງມີຄ່າຢ່າງຫລວງຫລາຍຂອງພວກເຂົາ, ແລະ ກັບມາຖື ຕົວຄືກັນກັບຊາວເລມັນພີ່ນ້ອງຂອງພວກເຂົາ.

And also the people who were called the people of Nephi began to be proud in their hearts, because of their exceeding riches, and become vain like unto their brethren, the Lamanites.

๔๔ ແລະ ນັບແຕ່ເວລານີ້ໄປ ສານຸສິດກໍເລີ່ມເສົ້າສະຫລົດໃຈເພາະ ບາບຂອງໂລກ.

And from this time the disciples began to sorrow for the sins of the world.

๔๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອສາມຮ້ອຍປີຜ່ານໄປ, ທັງຜູ້ຄົນຂອງນີໄຟ ແລະ ຜູ້ຄົນຂອງເລມັນກັບມາເປັນຄົນຊົ່ວ ຫລາຍຂຶ້ນເທົ່າໆກັນ.

And it came to pass that when three hundred years had passed away, both the people of Nephi and the Lamanites had become exceedingly wicked one like unto another.

๔๖ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຈນແກດີອານທັນໄດ້ແຜ່ ຂະຫຍາຍໄປທົ່ວໜ້າແຜ່ນດິນ; ແລະ ບໍ່ມີຜູ້ໃດຈັກຄົນທີ່ ຊອບທຳນອກຈາກສານຸສິດຂອງພຣະເຢຊູເທົ່ານັ້ນ. ແລະ ພວກ ເຂົາໄດ້ຄ້າຂາຍຄຳ ແລະ ເງິນ ຢູ່ໃນຮ້ານຄ້າຢ່າງຫລວງຫລາຍ, ແລະ ໄດ້ເຮັດການຄ້າຂາຍອື່ນໆນຳອີກ.

And it came to pass that the robbers of Gadianton did spread over all the face of the land; and there were none that were righteous save it were the disciples of Jesus. And gold and silver did they lay up in store in abundance, and did traffic in all manner of traffic.

๔๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກສາມຮ້ອຍຫ້າປີ ຜ່ານໄປ, (ແລະ ຜູ້ຄົນຍັງຄົງຢູ່ໃນຄວາມຊົ່ວຮ້າຍຢູ່) ອາໂມໄດ້ສິ້ນ ຊີວິດໄປ; ແລະ ອາມມາຣອນນ້ອງຊາຍຂອງລາວໄດ້ຮັກສາ ບັນທຶກແທນ.

And it came to pass that after three hundred and five years had passed away, (and the people did still remain in wickedness) Amos died; and his brother, Ammaron, did keep the record in his stead.

๔๘ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອສາມຮ້ອຍຊາວປີຜ່ານ ໄປ, ອາມມາຣອນໂດຍຖືກພຣະວິນຍານບໍລິສຸດຊົງນຳໄດ້ເຊື່ອງ ບັນທຶກທີ່ສັກສິດໄວ້—ແທ້ຈິງແລ້ວ, ແມ່ນບັນທຶກສັກສິດ ທັງໝົດ ຊຶ່ງຖືກມອບຕໍ່ໆກັນມາຈາກລຸ້ນສູ່ລຸ້ນ—ຈົນເຖິງປີທີ ສາມຮ້ອຍຊາວນັບຕັ້ງແຕ່ການສະເດັດມາຂອງພຣະຄຣິດ.

And it came to pass that when three hundred and twenty years had passed away, Ammaron, being constrained by the Holy Ghost, did hide up the records which were sacred—yea, even all the sacred records which had been handed down from generation to generation, which were sacred—even until the three hundred and twentieth year from the coming of Christ.

๔ຈ ແລະ ລາວໄດ້ເຊື່ອງມັນໄວ້ກັບພຣະຜູ້ເປັນເຈົ້າ, ເພື່ອມັນຈະ ຖືກ ນຳອອກມາຫາເຊື້ອສາຍຂອງຢາໂຄບຜູ້ທີ່ເຫລືອຢູ່ອີກ, ຕາມຄຳທຳນາຍ ແລະ ຕາມຄຳສັນຍາຂອງພຣະຜູ້ເປັນເຈົ້າ. ແລະ ບັນທຶກຂອງອາມມາຣອນຈົບລົງດັ່ງນີ້.

And he did hide them up unto the Lord, that they might come again unto the remnant of the house of Jacob, according to the prophecies and the promises of the Lord. And thus is the end of the record of Ammaron.

ໜັງສືມໍມອນ

ມໍມອນ ๑

๑ ແລະ ບັດນີ້ຂ້າພະເຈົ້າ ມໍມອນເຮັດ ບັນທຶກກ່ຽວກັບເລື່ອງທີ່ ຂ້າພະເຈົ້າໄດ້ເຫັນ ແລະ ໄດ້ຍິນ ແລະ ເອີ້ນໜັງສືນີ້ວ່າ ໜັງສືມ ມອນ.

๘ ແລະ ມັນຄືງເປັນໄລຍະເວລາໃກ້ກັບຕອນທີ່ ອາມມາຣອນ ເຊື່ອງບັນທຶກໄວ້ກັບພຣະຜູ້ເປັນເຈົ້ານັ້ນ, ເພີ່ນໄດ້ມາຫາ ຂ້າພະເຈົ້າ, (ຕອນນັ້ນຂ້າພະເຈົ້າມີອາຍຸປະມານສິບປີ, ແລະ ຂ້າພະເຈົ້າເລີ່ມມີ ຄວາມຮູ້ແດ່ແລ້ວຕາມແບບການຮຽນຮູ້ຂອງ ຜູ້ຄົນຂອງຂ້າພະເຈົ້າ) ແລະ ອາມມາຣອນໄດ້ເວົ້າກັບຂ້າພະເຈົ້າ ວ່າ: ຂ້ອຍເຫັນວ່າເຈົ້າເປັນເດັກທີ່ຈິງຈັງ ແລະ ເຈົ້າຮູ້ຈັກສັງເກດ;

๙ ສະນັ້ນ, ເມື່ອເຈົ້າມີອາຍຸໄດ້ຊາວສີ່ປີ ຂ້ອຍຢາກໃຫ້ເຈົ້າຈົດຈຳ ເລື່ອງທີ່ເຈົ້າໄດ້ສັງເກດມາກ່ຽວກັບຜູ້ຄົນພວກນີ້; ແລະ ເວລາ ເຈົ້າມີອາຍຸໄດ້ເທົ່ານັ້ນ ຈົ່ງໄປຫາແຜ່ນດິນອານທຳ, ໄປຫາເນີນ ພູທີ່ມີຊື່ວ່າ ຊິມ; ແລະ ບ່ອນນັ້ນແຫລະທີ່ຂ້ອຍໄດ້ຝັງແຜ່ນ ຈາລຶກສັກສິດທັງໝົດກ່ຽວກັບຜູ້ຄົນພວກນີ້ໄວ້ກັບພຣະຜູ້ເປັນ ເຈົ້າ.

๑๐ ແລະ ຈົ່ງເບິ່ງ, ໃຫ້ເຈົ້າເອົາ ແຜ່ນຈາລຶກຂອງນີໄຟ, ແລະ ສ່ວນ ທີ່ຍັງເຫລືອຢູ່ນັ້ນໃຫ້ເຈົ້າປະມັນໄວ້ໃນບ່ອນທີ່ມັນຢູ່ນັ້ນ; ແລະ ໃຫ້ບັນທຶກເລື່ອງທັງໝົດທີ່ເຈົ້າສັງເກດມາກ່ຽວກັບຜູ້ຄົນພວກ ນີ້ໄວ້ໃນແຜ່ນຈາລຶກຂອງນີໄຟນັ້ນ.

๑๑ ແລະ ຂ້າພະເຈົ້າມໍມອນໂດຍເປັນຜູ້ສືບຕະກຸນຂອງ ນີໄຟ, (ແລະ ບິດາຂອງຂ້າພະເຈົ້າກໍມີຊື່ວ່າ ມໍມອນ) ຂ້າພະເຈົ້າຈົ່ງຈື່ຈຳ ເລື່ອງຊຶ່ງອາມມາຣອນໄດ້ສັ່ງຂ້າພະເຈົ້າໄວ້.

๑๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ເມື່ອຂ້າພະເຈົ້າມີອາຍຸໄດ້ສິບ ເອັດປີ, ບິດາຂອງຂ້າພະເຈົ້າໄດ້ພາຂ້າພະເຈົ້າໄປຫາແຜ່ນດິນ ທາງໃຕ້, ຈົນໄປຮອດແຜ່ນດິນເຊຣາເຮັມລາ.

๑๓ ທົ່ວແຜ່ນດິນໄດ້ເຕັມໄປດ້ວຍອາຄານບ້ານເຮືອນຕ່າງໆ, ແລະ ມີຜູ້ຄົນຢູ່ຢ່າງຫລວງຫລາຍ ຄືກັບວ່າ ດິນຊາຍໃນທະເລ.

๑๔ ແລະ ເຫດການໄດ້ບັງເກີດຂຶ້ນໃນປີນີ້ຄື ມັນເລີ່ມມີສົງຄາມລະ ຫວ່າງຊາວນີໄຟ, ຊຶ່ງຊາວນີໄຟໄດ້ສົມທົບເຂົ້າກັບຊາວຢາໂຄບ ແລະ ຊາວໂຢເຊັບ ແລະ ຊາວໂຊຣໍາ; ແລະ ສົງຄາມນີ້ເປັນໄປລະ ຫວ່າງຊາວນີໄຟກັບຊາວເລມັນ ແລະ ຊາວເລມູເອນ ແລະ ຊາວ ອິດຊະມາເອນ.

๑๕ ບັດນີ້ຊາວເລມັນ ແລະ ຊາວເລມູເອນ ແລະ ຊາວ ອິດຊະມາເອນຖືກເອີ້ນວ່າ ຊາວເລມັນ, ແລະ ສົງຄາມນີ້ແມ່ນລະ ຫວ່າງຊາວນີໄຟກັບຊາວເລມັນ.

The Book of Mormon

Mormon 1

And now I, Mormon, make a record of the things which I have both seen and heard, and call it the Book of Mormon.

And about the time that Ammaron hid up the records unto the Lord, he came unto me, (I being about ten years of age, and I began to be learned somewhat after the manner of the learning of my people) and Ammaron said unto me: I perceive that thou art a sober child, and art quick to observe;

Therefore, when ye are about twenty and four years old I would that ye should remember the things that ye have observed concerning this people; and when ye are of that age go to the land Antum, unto a hill which shall be called Shim; and there have I deposited unto the Lord all the sacred engravings concerning this people.

And behold, ye shall take the plates of Nephi unto yourself, and the remainder shall ye leave in the place where they are; and ye shall engrave on the plates of Nephi all the things that ye have observed concerning this people.

And I, Mormon, being a descendant of Nephi, (and my father's name was Mormon) I remembered the things which Ammaron commanded me.

And it came to pass that I, being eleven years old, was carried by my father into the land southward, even to the land of Zarahemla.

The whole face of the land had become covered with buildings, and the people were as numerous almost, as it were the sand of the sea.

And it came to pass in this year there began to be a war between the Nephites, who consisted of the Nephites and the Jacobites and the Josephites and the Zoramites; and this war was between the Nephites, and the Lamanites and the Lemuelites and the Ishmaelites.

Now the Lamanites and the Lemuelites and the Ishmaelites were called Lamanites, and the two parties were Nephites and Lamanites.

๑๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ສົງຄາມເລີ່ມເກີດຂຶ້ນໃນ ບັນດາພວກເຂົາທີ່ຊາຍແດນເຊຣາເຮັມລາ, ໃກ້ແມ່ນ້ຳຊີโดน.

And it came to pass that the war began to be among them in the borders of Zarahemla, by the waters of Sidon.

๑๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວນີໄຟໄດ້ເຄົ້າໂຮມພົນ ທະຫານໄວ້ເປັນຈຳນວນຫລວງຫລາຍ, ເຖິງຂະໜາດທີ່ມີ ຈຳນວນຫລາຍກວ່າສາມໝື່ນຄົນ. ແລະ ເຫດການໄດ້ບັງເກີດ ຂຶ້ນຄື ພວກເຂົາໄດ້ມີການສູ້ຮົບກັນຫລາຍເທື່ອໃນປີດຽວກັນນີ້, ຊຶ່ງຊາວນີໄຟໄດ້ເອົາຊະນະຊາວເລມັນ ແລະ ໄດ້ຂ້າພວກເຂົາເປັນ ຈຳນວນຫລວງຫລາຍ.

And it came to pass that the Nephites had gathered together a great number of men, even to exceed the number of thirty thousand. And it came to pass that they did have in this same year a number of battles, in which the Nephites did beat the Lamanites and did slay many of them.

๑๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊາວເລມັນໄດ້ລົ້ມເລີກ ແຜນການຂອງພວກເຂົາ, ແລະ ມັນຈຶ່ງໄດ້ມີສັນຕິສຸກຢູ່ໃນ ແຜ່ນດິນອີກ; ແລະ ສັນຕິສຸກໄດ້ຄົງຢູ່ເປັນເວລາປະມານສີ່ປີ, ຄືບໍ່ມີການຂ້າຟັນກັນເລີຍ.

And it came to pass that the Lamanites withdrew their design, and there was peace settled in the land; and peace did remain for the space of about four years, that there was no bloodshed.

๑๓ ແຕ່ວ່າຄວາມຊົ່ວຮ້າຍໄດ້ແຜ່ຂະຫຍາຍໄປທົ່ວໜ້າແຜ່ນດິນ, ເຖິງຂະໜາດທີ່ພຣະຜູ້ເປັນເຈົ້າໄດ້ເອົາສານຸສິດ ທີ່ຮັກຂອງ ພຣະອົງໄປ, ແລະ ວຽກງານແຫ່ງການມະຫັດສະจัน ແລະ ການປິ່ນປົວໄດ້ຢຸດລົງ ເພາະຄວາມຊົ່ວຮ້າຍຂອງຜູ້ຄົນ.

But wickedness did prevail upon the face of the whole land, insomuch that the Lord did take away his beloved disciples, and the work of miracles and of healing did cease because of the iniquity of the people.

๑๔ ແລະ ບໍ່ມີ ຂອງປະທານມາຈາກພຣະຜູ້ເປັນເຈົ້າ, ແລະ ພຣະວິນຍານບໍລິສຸດບໍ່ໄດ້ສະເດັດມາຫາຜູ້ໃດ, ເພາະຄວາມ ຊົ່ວຮ້າຍ ແລະ ຄວາມ ບໍ່ເຊື່ອຖືຂອງພວກເຂົາ.

And there were no gifts from the Lord, and the Holy Ghost did not come upon any, because of their wickedness and unbelief.

๑๕ ແລະ ຂ້າພະເຈົ້າຊຶ່ງມີອາຍຸໄດ້ສິບຫ້າປີ ແລະ ພໍມີຄວາມຄິດ ແດ່ແລ້ວ, ສະນັ້ນ ຂ້າພະເຈົ້າຈຶ່ງໄດ້ຮັບການສະເດັດມາຢ້ຽມຢາມ ຈາກພຣະຜູ້ເປັນເຈົ້າ, ແລະ ໄດ້ຊິມລົດຊາດ ແລະ ຮູ້ເຖິງພຣະກະ ລຸນາທິຄຸນຂອງພຣະເຢຊູ.

And I, being fifteen years of age and being somewhat of a sober mind, therefore I was visited of the Lord, and tasted and knew of the goodness of Jesus.

๑๖ ແລະ ຂ້າພະເຈົ້າໄດ້ພະຍາຍາມສັ່ງສອນຜູ້ຄົນພວກນີ້, ແຕ່ ຂ້າພະເຈົ້າຖືກປິດປາກໄວ້, ແລະ ຂ້າພະເຈົ້າຖືກຫ້າມບໍ່ໃຫ້ ສັ່ງສອນພວກເຂົາ; ເພາະຈົ່ງເບິ່ງ ພວກເຂົາໄດ້ ກະບົດຕໍ່ ພຣະເຈົ້າຂອງພວກເຂົາໂດຍເຈດຕະນາ; ແລະ ສານຸສິດທີ່ຮັກ ຖືກ ພາໜີໄປຈາກແຜ່ນດິນ, ເພາະຄວາມຊົ່ວຮ້າຍຂອງພວກ ເຂົາ.

And I did endeavor to preach unto this people, but my mouth was shut, and I was forbidden that I should preach unto them; for behold they had wilfully rebelled against their God; and the beloved disciples were taken away out of the land, because of their iniquity.

๑๗ ແຕ່ຂ້າພະເຈົ້າຍັງຄົງຢູ່ໃນບັນດາພວກເຂົາ, ແຕ່ຂ້າພະເຈົ້າ ຖືກຫ້າມບໍ່ໃຫ້ສັ່ງສອນພວກເຂົາ, ເພາະຄວາມແຂງກະດ້າງ ຂອງໃຈຂອງພວກເຂົາ; ແລະ ເພາະຄວາມແຂງກະດ້າງຂອງໃຈ ຂອງພວກເຂົານີ້, ແຜ່ນດິນຈຶ່ງຖືກ ສາບແຊ່ງເພາະພວກເຂົາ.

But I did remain among them, but I was forbidden to preach unto them, because of the hardness of their hearts; and because of the hardness of their hearts the land was cursed for their sake.

๑๘ ແລະ ພວກໂຈນແກດີອານທັນເຫລົ່ານີ້, ຜູ້ຊຶ່ງຢູ່ໃນບັນດາ ຊາວເລມັນ, ໄດ້ລົບກວນແຜ່ນດິນ, ເຖິງຂະໜາດທີ່ຜູ້ອາໄສຢູ່ໃນ ນັ້ນເລີ່ມເຊື່ອງ ຊັບສົມບັດຂອງຕົນໄວ້ໃນດິນ; ແລະ ມັນໄດ້ ສູນຫາຍໄປເພາະພຣະຜູ້ເປັນເຈົ້າໄດ້ສາບແຊ່ງແຜ່ນດິນໄວ້, ເພາະພວກເຂົາຈະຍຶດມັນໄວ້ບໍ່ໄດ້, ທັງຈະເອົາມັນຄືນມາອີກກໍບໍ່ ໄດ້.

And these Gadianton robbers, who were among the Lamanites, did infest the land, insomuch that the inhabitants thereof began to hide up their treasures in the earth; and they became slippery, because the Lord had cursed the land, that they could not hold them, nor retain them again.

໑໘ ແລະ ເຫດການໄດ້ບັງເກີດຂຶ້ນຄື ມັນມີເວດມົນ, ຄາຖາ, ແລະ
ໄສຍະສາດ; ແລະ ອຳນາດຂອງມານຮ້າຍກະທຳຂຶ້ນຢູ່ທົ່ວຜືນ
ແຜ່ນດິນ, ຈົນວ່າເຮັດໃຫ້ຄຳທຳນາຍຂອງອະບີນາໄດ ແລະ ຂອງ
ຊາມູເອນຄົນເລມັນໄດ້ຮັບຄວາມສຳເລັດທັງໝົດ.

And it came to pass that there were sorceries, and witchcrafts, and magics; and the power of the evil one was wrought upon all the face of the land, even unto the fulfilling of all the words of Abinadi, and also Samuel the Lamanite.

ມໍມອນ ๘

๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີດຽວກັນນັ້ນ ໄດ້ມີສົງຄາມ
ອີກລະຫว่างຊາວເລມັນກັບຊາວນີໄຟ. ແລະ ເຖິງແມ່ນว่า
ຂ້າພະເຈົ້າເອງກໍມີອາຍຸນ້ອຍຢູ່ແຕ່ว่ามีร่างกายใหย่สูง;
ສະນັ້ນ ຜູ້ຄົນຂອງນີໄຟຈຶ່ງໄດ້ແຕ່ງຕັ້ງໃຫ້ຂ້າພະເຈົ້າເປັນຜູ້ນຳ
ຂອງພວກເຂົາ, ຫລື ເປັນຜູ້ນຳກອງທັບຂອງພວກເຂົາ.

๘ ສະນັ້ນ ເຫດການໄດ້ບັງເກີດຂຶ້ນຄື ເວລາຂ້າພະເຈົ້າມີອາຍຸໄດ້
ສິບຫົກປີ ຂ້າພະເຈົ້າໄດ້ອອກນຳໜ້າກອງທັບຂອງຊາວນີໄຟ
ເພື່ອໄປຕໍ່ສູ້ກັບຊາວເລມັນ; ສະນັ້ນ ເວລາສາມຮ້ອຍຊາວຫົກປີ
ໄດ້ຜ່ານໄປ.

๙ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີສາມຮ້ອຍຊາວເຈັດ
ຊາວເລມັນໄດ້ເຂົ້າມາໂຈມຕີພວກເຮົາດ້ວຍກຳລັງອັນ
ຫລວງຫລາຍທີ່ສຸດ, ເຖິງຂະໜາດທີ່ພວກເຂົາໄດ້ເຮັດໃຫ້
ກອງທັບຂອງຂ້າພະເຈົ້າຕົກໃຈ; ສະນັ້ນພວກເຂົາຈຶ່ງ ບໍ່ຍອມ
ຕໍ່ສູ້, ແລະ ພວກເຂົາເລີ່ມຖອຍໄປຫາແຜ່ນດິນທາງເໜືອ.

๑๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ມາຮອດເມືອງ
ໜຶ່ງມີຊື່ว่า ອານໂກລາ, ແລະ ພວກເຮົາໄດ້ເຂົ້າໄປເປັນເຈົ້າຂອງ
ເມືອງນັ້ນ, ແລະ ໄດ້ຕຽມພ້ອມເພື່ອປ້ອງກັນຕົວໃຫ້ພົ້ນຈາກ
ຊາວເລມັນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ເສີມ
ສ້າງກຳລັງປ້ອງກັນເມືອງຈົນໝົດຄວາມສາມາດຂອງພວກ
ເຮົາ; ເຖິງແມ່ນว่าพวกเราได้เสิมสร้างกำลังทั้งหมดไว้
ກໍຕາມ ແຕ່ຊາວເລມັນກໍຍັງໄດ້ມາໂຈມຕີພວກເຮົາ ແລະ ໄດ້
ຂັບໄລ່ພວກເຮົາອອກຈາກເມືອງນັ້ນໄປ.

๑๑ ແລະ ພວກເຂົາໄດ້ຂັບໄລ່ພວກເຮົາອອກຈາກແຜ່ນດິນດາວິດ
ນຳອີກ.

๑๒ ແລະ ພວກເຮົາໄດ້ເດີນທັບຕໍ່ໄປ ແລະ ມາຮອດແຜ່ນດິນ
ໂຢຊວຍ, ຊຶ່ງຕັ້ງຢູ່ຕາມຊາຍແດນທາງຕາເວັນຕົກໃກ້ກັບຝັ່ງ
ທະເລ.

๑๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກເຮົາໄດ້ຫ້ອນໂຮມຜູ້ຄົນ
ຂອງພວກເຮົາຢ່າງວ່ອງໄວທີ່ສຸດເທົ່າທີ່ຈະໄວໄດ້, ເພື່ອພວກ
ເຮົາຈະໄດ້ຫ້ອນໂຮມພວກເຂົາໄວ້ເປັນກຸ່ມດຽວກັນ.

๑๔ ແຕ່ຈົ່ງເບິ່ງ, ແຜ່ນດິນນັ້ນເຕັມໄປດ້ວຍພວກໂຈນ ແລະ ຊາວ
ເລມັນ; ແລະ ທັງໆທີ່ຄວາມພິນາດອັນໃຫຍ່ຫລວງຊຶ່ງລໍຖ້າ
ຜູ້ຄົນຂອງຂ້າພະເຈົ້າຢູ່, ພວກເຂົາກໍບໍ່ໄດ້ກັບໃຈຈາກການເຮັດ
ຄວາມຊົ່ວຂອງພວກເຂົາ; ສະນັ້ນ ມັນຈຶ່ງມີເລືອດ ແລະ ການຂ້າ
ຟັນຕະຫລອດທົ່ວຜືນແຜ່ນດິນ, ທັງຝ່ายชาวเลมัน ແລະ
ຝ່ายชาวนีไฟเช่นดรุงกัน; ແລະ ມັນມີການປະຕິວັດທົ່ວຜືນ
ແຜ່ນດິນ.

Mormon 2

And it came to pass in that same year there began to be a war again between the Nephites and the Lamanites. And notwithstanding I being young, was large in stature; therefore the people of Nephi appointed me that I should be their leader, or the leader of their armies.

Therefore it came to pass that in my sixteenth year I did go forth at the head of an army of the Nephites, against the Lamanites; therefore three hundred and twenty and six years had passed away.

And it came to pass that in the three hundred and twenty and seventh year the Lamanites did come upon us with exceedingly great power, insomuch that they did frighten my armies; therefore they would not fight, and they began to retreat towards the north countries.

๑ ແລະ ບັດນີ້, ຈົ່ງເບິ່ງຂ້າພະເຈົ້າຈະເວົ້າກັບ ຜູ້ທີ່ເຫລືອຢູ່ຂອງ ຜູ້ຄົນພວກນີ້ ຜູ້ທີ່ໄດ້ຮັບການຍົກເວັ້ນ, ຖ້າຫາກເປັນໄປວ່າ ພຣະຜູ້ເປັນເຈົ້າຈະປະທານສິ່ງທີ່ຂ້າພະເຈົ້າຈະເວົ້າໄປນີ້ໃຫ້ແກ່ ພວກເຂົາ, ເພື່ອພວກເຂົາຈະໄດ້ຮູ້ຈັກເຖິງເລື່ອງຕ່າງໆຂອງ ບັນພະບຸລຸດຂອງພວກເຂົາ; ແທ້ຈິງແລ້ວ, ຂ້າພະເຈົ້າເວົ້າກັບ ທ່ານວ່າ, ທ່ານຜູ້ເປັນເຊື້ອສາຍອິດສະຣາເອນທີ່ເຫລືອຢູ່; ແລະ ນີ້ຄືຄຳທີ່ຂ້າພະເຈົ້າກ່າວ:

Mormon 7

And now, behold, I would speak somewhat unto the remnant of this people who are spared, if it so be that God may give unto them my words, that they may know of the things of their fathers; yea, I speak unto you, ye remnant of the house of Israel; and these are the words which I speak:

๘ ຈົ່ງຮູ້ໄວ້ວ່າ ທ່ານເປັນ ເຊື້ອສາຍອິດສະຣາເອນ.

Know ye that ye are of the house of Israel.

๙ ຈົ່ງຮູ້ໄວ້ວ່າ ທ່ານຕ້ອງກັບໃຈ ຖ້າບໍ່ດັ່ງນັ້ນ, ທ່ານຈະລອດບໍ່ ໄດ້.

Know ye that ye must come unto repentance, or ye cannot be saved.

๑๐ ຈົ່ງຮູ້ໄວ້ວ່າ ທ່ານຕ້ອງປະຖິ້ມອາວຸດແຫ່ງສົງຄາມຂອງທ່ານ ເສຍ, ແລະ ບໍ່ໃຫ້ເບີກບານໃນການຫລັ່ງເລືອດອີກຕໍ່ໄປ, ແລະ ບໍ່ ຕ້ອງຈັບມັນຂຶ້ນມາອີກ ເວັ້ນເສຍແຕ່ເວລາທີ່ພຣະເຈົ້າບັນຊາ ທ່ານເທົ່ານັ້ນ.

Know ye that ye must lay down your weapons of war, and delight no more in the shedding of blood, and take them not again, save it be that God shall command you.

๑๑ ຈົ່ງຮູ້ໄວ້ວ່າ ທ່ານຕ້ອງມາຫາ ຄວາມຮູ້ເລື່ອງກ່ຽວກັບ ບັນພະບຸລຸດຂອງທ່ານ, ແລະ ກັບໃຈຈາກບາບ ແລະ ຄວາມ ຊົ່ວຮ້າຍທັງໝົດຂອງທ່ານ, ແລະ ເຊື່ອໃນພຣະເຢຊູຄຣິດ, ວ່າ ພຣະອົງເປັນພຣະບຸດຂອງພຣະເຈົ້າ, ແລະ ວ່າພຣະອົງໄດ້ຖືກ ຊາວຢິວຂ້າ, ແລະ ໂດຍອຳນາດຂອງພຣະບິດາ ພຣະອົງໄດ້ເປັນ ຄືນມາມີຊີວິດອີກ, ຊຶ່ງໂດຍການນັ້ນ ພຣະອົງໄດ້ ໄຊຊະນະເໜືອ ຫລຸມສົບ; ແລະ ໃນພຣະອົງຄວາມເຈັບປວດແຫ່ງຄວາມຕາຍ ໄດ້ຖືກກືນໄວ້ນຳອີກ.

Know ye that ye must come to the knowledge of your fathers, and repent of all your sins and iniquities, and believe in Jesus Christ, that he is the Son of God, and that he was slain by the Jews, and by the power of the Father he hath risen again, whereby he hath gained the victory over the grave; and also in him is the sting of death swallowed up.

๑๒ ແລະ ພຣະອົງເຮັດໃຫ້ເກີດມີ ການຟື້ນຄືນຊີວິດຂອງຄົນຕາຍ, ຊຶ່ງໂດຍການນັ້ນມະນຸດຈະຕ້ອງຖືກຍົກຂຶ້ນມາຢືນຢູ່ຕໍ່ໜ້າ ບັນລັງພິພາກສາຂອງພຣະອົງ.

And he bringeth to pass the resurrection of the dead, whereby man must be raised to stand before his judgment-seat.

๑๓ ແລະ ພຣະອົງໄດ້ນຳ ການໄຖ່ມາສູ່ໂລກ, ຊຶ່ງໂດຍການນັ້ນຜູ້ ທີ່ຖືກພົບວ່າ ບໍ່ມີຄວາມຜິດຕໍ່ພຣະພັກຂອງພຣະອົງໃນວັນ ພິພາກສາ ຍ່ອມໄດ້ຮັບອະນຸຍາດໃຫ້ເຂົ້າ ໄປຢູ່ໃນທີ່ປະທັບຂອງ ພຣະເຈົ້າໃນອານາຈັກຂອງພຣະອົງ, ເພື່ອຮ້ອງເພງສັນລະເສີນ ໂດຍບໍ່ຢຸດຢັ້ງຮ່ວມກັບ ຜູ້ຂັບຮ້ອງຢູ່ເບື້ອງເທິງ, ເພື່ອສັນລະເສີນ ພຣະບິດາ, ແລະ ພຣະບຸດ, ແລະ ພຣະວິນຍານບໍລິສຸດ, ຊຶ່ງເປັນ ພຣະເຈົ້າດຽວກັນ, ໃນສະພາວະແຫ່ງ ຄວາມສຸກອັນບໍ່ມີທີ່ສຸດ.

And he hath brought to pass the redemption of the world, whereby he that is found guiltless before him at the judgment day hath it given unto him to dwell in the presence of God in his kingdom, to sing ceaseless praises with the choirs above, unto the Father, and unto the Son, and unto the Holy Ghost, which are one God, in a state of happiness which hath no end.

๑๔ ສະນັ້ນ ຈົ່ງກັບໃຈ, ແລະ ຮັບບັບຕິສະມາໃນພຣະນາມຂອງ ພຣະເຢຊູ, ແລະ ຍຶດໝັ້ນໃນ ພຣະກິດຕິຄຸນຂອງພຣະຄຣິດ, ຊຶ່ງ ຈະຖືກວາງຢູ່ຕໍ່ໜ້າທ່ານ, ບໍ່ພຽງແຕ່ມີຢູ່ໃນ ບັນທຶກນີ້ເທົ່ານັ້ນ ແຕ່ມີຢູ່ໃນບັນທຶກຊຶ່ງຈະມາຫາຄົນຕ່າງຊາດ ຈາກຊາວຢິວນຳ ອີກ, ຊຶ່ງບັນທຶກນັ້ນຈະອອກຈາກຄົນຕ່າງຊາດ ມາຫາທ່ານ.

Therefore repent, and be baptized in the name of Jesus, and lay hold upon the gospel of Christ, which shall be set before you, not only in this record but also in the record which shall come unto the Gentiles from the Jews, which record shall come from the Gentiles unto you.

ຈ ເພາະຈົ່ງເບິ່ງ, ເລື່ອງນີ້ມີຂຽນໄວ້ໂດຍມີເຈດຕະນາທີ່ຈະໃຫ້ທ່ານ ເຊື່ອເລື່ອງນັ້ນ; ແລະ ຖ້າຫາກທ່ານເຊື່ອເລື່ອງນັ້ນ; ທ່ານ ຈະເຊື່ອເລື່ອງນີ້ຄືກັນ; ແລະ ຖ້າຫາກທ່ານເຊື່ອເລື່ອງນີ້ ທ່ານຈະ ຮູ້ກ່ຽວກັບບັນພະບຸລຸດຂອງທ່ານ, ແລະ ຈະຮູ້ກ່ຽວກັບ ວຽກງານອັນໜ້າອັດສະຈັນໃຈນຳອີກ ຊຶ່ງກະທຳຂຶ້ນໂດຍ ອຳນາດຂອງພຣະເຈົ້າໃນບັນດາພວກເຂົາ.

ຈ ແລະ ທ່ານຈະຮູ້ອີກວ່າ ທ່ານເປັນສ່ວນໜຶ່ງທີ່ເຫລືອຢູ່ຂອງ ເຊື້ອສາຍຂອງຢາໂຄບ; ສະນັ້ນ ທ່ານຈຶ່ງຖືກນັບເຂົ້າຢູ່ໃນບັນດາ ຜູ້ຄົນແຫ່ງພັນທະສັນຍາທຳອິດ; ແລະ ຖ້າຫາກເປັນໄປວ່າ ທ່ານເຊື່ອໃນພຣະຄຣິດ, ແລະ ຮັບບັບຕິສະມາດ້ວຍນ້ຳກ່ອນ, ແລ້ວດ້ວຍໄຟ ແລະ ດ້ວຍພຣະວິນຍານບໍລິສຸດ, ຕາມ ຕົວຢ່າງ ຂອງພຣະຜູ້ຊ່ວຍໃຫ້ລອດຂອງພວກເຮົາ, ຕາມສິ່ງທີ່ພຣະອົງ ບັນຊາພວກເຮົາ, ມັນຈະດີກັບທ່ານໃນວັນແຫ່ງການພິພາກສາ ນັ້ນ. ອາແມນ.

For behold, this is written for the intent that ye may believe that; and if ye believe that ye will believe this also; and if ye believe this ye will know concerning your fathers, and also the marvelous works which were wrought by the power of God among them.

And ye will also know that ye are a remnant of the seed of Jacob; therefore ye are numbered among the people of the first covenant; and if it so be that ye believe in Christ, and are baptized, first with water, then with fire and with the Holy Ghost, following the example of our Savior, according to that which he hath commanded us, it shall be well with you in the day of judgment. Amen.

ມໍມອນ ๘

Mormon 8

๑ ຈົ່ງເບິ່ງຂ້າພະເຈົ້າ ໂມໂຣໄນເຮັດ ບັນທຶກຂອງມໍມອນບິດາຂອງ ຂ້າພະເຈົ້າຈົບແລ້ວ. ຈົ່ງເບິ່ງ, ຂ້າພະເຈົ້າມີພຽງບໍ່ເທົ່າໃດເລື່ອງ ທີ່ຈະຂຽນ, ຊຶ່ງເປັນເລື່ອງທີ່ບິດາຂອງຂ້າພະເຈົ້າສັ່ງໃຫ້ ຂ້າພະເຈົ້າຂຽນໄວ້.

Behold I, Moroni, do finish the record of my father, Mormon. Behold, I have but few things to write, which things I have been commanded by my father.

๒ ແລະ ບັດນີ້ເຫດການໄດ້ບັງເກີດຂຶ້ນຄື ຫລັງຈາກການສູ້ຮົບ ຄັ້ງໃຫຍ່ ແລະ ໜ້າສະຫຍົດສະຫຍອງທີ່ຄູໂມຣານັ້ນ, ຈົ່ງເບິ່ງ, ຊາວນີໄຟຜູ້ທີ່ໜີໄປຫາແຜ່ນດິນທາງໃຕ້ໄດ້ຖືກ ຊາວເລມັນ ຕິດຕາມລ່າຈົນຖືກທຳລາຍໄປໝົດ.

And now it came to pass that after the great and tremendous battle at Cumorah, behold, the Nephites who had escaped into the country southward were hunted by the Lamanites, until they were all destroyed.

๓ ແລະ ບິດາຂອງຂ້າພະເຈົ້າກໍຖືກພວກເຂົາຂ້ານຳອີກ, ແລະ ຂ້າພະເຈົ້າຖືກປ່ອຍໃຫ້ຢູ່ ຜູ້ດຽວເພື່ອຂຽນເລື່ອງເສົ້າ ສະຫລົດໃຈກ່ຽວກັບຄວາມພິນາດຂອງຜູ້ຄົນຂອງຂ້າພະເຈົ້າ. ແຕ່ຈົ່ງເບິ່ງ, ພວກເຂົາໄດ້ຈາກໄປແລ້ວ, ແລະ ຂ້າພະເຈົ້າກໍໄດ້ ເຮັດໃຫ້ຄຳສັ່ງຂອງບິດາຂ້າພະເຈົ້າສຳເລັດແລ້ວ. ແລະ ພວກ ເຂົາຈະຂ້າຂ້າພະເຈົ້າຫລືບໍ່, ຂ້າພະເຈົ້າກໍບໍ່ຮູ້.

And my father also was killed by them, and I even remain alone to write the sad tale of the destruction of my people. But behold, they are gone, and I fulfil the commandment of my father. And whether they will slay me, I know not.

๔ ສະນັ້ນ ຂ້າພະເຈົ້າຈະຂຽນບັນທຶກ ແລະ ຈະເຊື່ອງມັນໄວ້ໃນ ດິນ; ແລະ ບ່ອນໃດທີ່ຂ້າພະເຈົ້າຈະໄປນັ້ນບໍ່ສຳຄັນແລ້ວ.

Therefore I will write and hide up the records in the earth; and whither I go it mattereth not.

๕ ຈົ່ງເບິ່ງ, ບິດາຂອງຂ້າພະເຈົ້າໄດ້ເຮັດ ບັນທຶກນີ້, ແລະ ເພີ່ນ ໄດ້ຂຽນຈຸດປະສົງຂອງມັນໄວ້. ແລະ ຈົ່ງເບິ່ງ, ຂ້າພະເຈົ້າຈະຂຽນ ມັນໄວ້ອີກຖ້າຫາກຂ້າພະເຈົ້າມີບ່ອນຂຽນໃນ ແຜ່ນຈາລຶກ, ແຕ່ ຂ້າພະເຈົ້າບໍ່ມີ, ແລະ ຂ້າພະເຈົ້າກໍບໍ່ມີໂລຫະອີກ, ເພາະ ຂ້າພະເຈົ້າຢູ່ຄົນດຽວ. ບິດາຂອງຂ້າພະເຈົ້າໄດ້ຖືກຂ້າຢູ່ໃນການສູ້ ຮົບພ້ອມທັງຍາດພີ່ນ້ອງຂອງຂ້າພະເຈົ້າທັງໝົດ, ແລະ ຂ້າພະເຈົ້າບໍ່ມີໝູ່ເພື່ອນເລີຍທັງບໍ່ມີບ່ອນຈະໄປຫາ; ແລະ ຂ້າພະເຈົ້າບໍ່ຮູ້ວ່າ ພຣະຜູ້ເປັນເຈົ້າຈະຍອມໃຫ້ຂ້າພະເຈົ້າມີຊີວິດ ຢູ່ດົນປານໃດ.

Behold, my father hath made this record, and he hath written the intent thereof. And behold, I would write it also if I had room upon the plates, but I have not; and ore I have none, for I am alone. My father hath been slain in battle, and all my kinsfolk, and I have not friends nor whither to go; and how long the Lord will suffer that I may live I know not.

๖ ຈົ່ງເບິ່ງ, ສີ່ຮ້ອຍປີໄດ້ຜ່ານໄປນັບຕັ້ງແຕ່ການສະເດັດມາຂອງ ພຣະຜູ້ເປັນເຈົ້າ ແລະ ພຣະຜູ້ຊ່ວຍໃຫ້ລອດ.

Behold, four hundred years have passed away since the coming of our Lord and Savior.

๗ ແລະ ຈົ່ງເບິ່ງ, ຊາວເລມັນໄດ້ຕາມລ່າຊາວນີໄຟຜູ້ຄົນຂອງ ຂ້າພະເຈົ້າ, ຈາກເມືອງໜຶ່ງໄປຫາອີກເມືອງໜຶ່ງ ແລະ ຈາກ ບ່ອນໜຶ່ງໄປຫາອີກບ່ອນໜຶ່ງ, ຈົນວ່າບໍ່ເຫລືອຈັກຄົນ; ແລະ ການຕົກຂອງພວກເຂົານັ້ນໃຫຍ່ຫລວງ; ແທ້ຈິງແລ້ວ, ຄວາມ ພິນາດຂອງຊາວນີໄຟຜູ້ຄົນຂອງຂ້າພະເຈົ້ານັ້ນຍິ່ງໃຫຍ່ ແລະ ໜ້າອັດສະຈັນທີ່ສຸດ.

And behold, the Lamanites have hunted my people, the Nephites, down from city to city and from place to place, even until they are no more; and great has been their fall; yea, great and marvelous is the destruction of my people, the Nephites.

๘ ແລະ ຈົ່ງເບິ່ງ, ມັນແມ່ນພຣະຫັດຂອງພຣະຜູ້ເປັນເຈົ້າທີ່ ທຳການນີ້. ແລະ ຈົ່ງເບິ່ງອີກ, ຊາວເລມັນກຳລັງເຮັດ ສົງຄາມ ຕໍ່ສູ້ກັນເອງຢູ່; ແລະ ທັງທົ່ວຜືນແຜ່ນດິນນີ້ເປັນຮອບໜຶ່ງຂອງ ການຄາດຕະກຳ ແລະ ການນອງເລືອດທີ່ຕໍ່ເນື່ອງກັນບໍ່ມີຍາມ ເຊົ້າ; ແລະ ບໍ່ມີຜູ້ໃດຮູ້ວ່າ ສົງຄາມຈະສິ້ນສຸດລົງຕອນໃດ.

And behold, it is the hand of the Lord which hath done it. And behold also, the Lamanites are at war one with another; and the whole face of this land is one continual round of murder and bloodshed; and no one knoweth the end of the war.

ນ ແລະ ບັດນີ້, ຈົ່ງເບິ່ງຂ້າພະເຈົ້າຈະບໍ່ເວົ້າກ່ຽວກັບພວກເຂົາ ອີກຕໍ່ໄປ, ເພາະວ່າບໍ່ມີຜູ້ໃດເລີຍທີ່ເຫລືອຢູ່ນອກຈາກຊາວເລມັນ ແລະ ພວກໂຈນເທົ່ານັ້ນທີ່ຍັງມີຊີວິດຢູ່ໃນຜືນແຜ່ນດິນ.

And now, behold, I say no more concerning them, for there are none save it be the Lamanites and robbers that do exist upon the face of the land.

ຊ ແລະ ບໍ່ມີຜູ້ໃດຮູ້ຈັກພຣະເຈົ້າທີ່ທ່ຽງແທ້ເລີຍ ນອກຈາກ ສານຸ ສິດຂອງພຣະເຢຊູ, ຜູ້ທີ່ຄົງຢູ່ໃນແຜ່ນດິນຈົນຮອດເວລາທີ່ ຄວາມຊົ່ວຮ້າຍຂອງຜູ້ຄົນໃຫຍ່ຫລວງ; ແລ້ວພຣະຜູ້ເປັນເຈົ້າຈະ ບໍ່ປ່ອຍໃຫ້ພວກເພີ່ນ ຢູ່ກັບຜູ້ຄົນອີກ; ແລະ ພວກເພີ່ນຍັງຢູ່ໃນ ແຜ່ນດິນຫລືບໍ່ນັ້ນ ບໍ່ມີຜູ້ໃດຮູ້.

And there are none that do know the true God save it be the disciples of Jesus, who did tarry in the land until the wickedness of the people was so great that the Lord would not suffer them to remain with the people; and whether they be upon the face of the land no man knoweth.

ຊ ແຕ່ຈົ່ງເບິ່ງ, ບິດາຂອງຂ້າພະເຈົ້າ ແລະ ຂ້າພະເຈົ້າໄດ້ເຫັນ ພວກເພີ່ນ, ແລະ ພວກເພີ່ນໄດ້ປະຕິບັດສາດສະໜາກິດແກ່ ພວກເຮົາ.

But behold, my father and I have seen them, and they have ministered unto us.

ຊ ແລະ ຜູ້ໃດທີ່ໄດ້ຮັບບັນທຶກນີ້ ແລະ ບໍ່ຕຳນິຕິຕຽນມັນ ເພາະຂໍ້ ບົກພ່ອງທີ່ຢູ່ໃນນັ້ນ, ຜູ້ນັ້ນຈະຮູ້ຈັກເຖິງ ເລື່ອງສຳຄັນກວ່ານີ້. ຈົ່ງເບິ່ງ, ຂ້າພະເຈົ້າຄືໂມໂຣໄນ; ແລະ ຖ້າຫາກເປັນໄປໄດ້, ຂ້າພະເຈົ້າຈະເຮັດໃຫ້ທຸກສິ່ງທຸກຢ່າງເປັນທີ່ຮູ້ຈັກແກ່ທ່ານ.

And whoso receiveth this record, and shall not condemn it because of the imperfections which are in it, the same shall know of greater things than these. Behold, I am Moroni; and were it possible, I would make all things known unto you.

ຊ ຈົ່ງເບິ່ງ, ຂ້າພະເຈົ້າຂໍຈົບການເວົ້າກ່ຽວກັບຜູ້ຄົນພວກນີ້ໄວ້ ເທົ່ານີ້. ຂ້າພະເຈົ້າເປັນລູກຊາຍຂອງມໍມອນ, ແລະ ບິດາຂອງ ຂ້າພະເຈົ້າເປັນ ຜູ້ສືບຕະກຸນຂອງນີໄຟ.

Behold, I make an end of speaking concerning this people. I am the son of Mormon, and my father was a descendant of Nephi.

ຊ ແລະ ຂ້າພະເຈົ້າຄືຜູ້ທີ່ ເຊື່ອງບັນທຶກໄວ້ກັບພຣະຜູ້ເປັນເຈົ້າ; ແຜ່ນຈາລຶກນີ້ບໍ່ມີຄ່າຫຍັງ, ຕາມພຣະບັນຊາຂອງພຣະຜູ້ເປັນ ເຈົ້າ, ເພາະວ່າພຣະອົງກ່າວຢ່າງແນ່ນອນວ່າບໍ່ມີຜູ້ໃດຈະໄດ້ມັນ ໄປ ເພື່ອຫາຜົນປະ�โຫຍດສ່ວນຕົວ; ແຕ່ວ່າບັນທຶກທີ່ຢູ່ໃນນັ້ນ ມີຄ່າທີ່ສຸດ ແລະ ຜູ້ໃດທີ່ຈະນຳມັນໄປສູ່ຄວາມສະຫວ່າງ, ພຣະ ຜູ້ເປັນເຈົ້າຈະປະທານພອນໃຫ້ແກ່ຜູ້ນັ້ນ.

And I am the same who hideth up this record unto the Lord; the plates thereof are of no worth, because of the commandment of the Lord. For he truly saith that no one shall have them to get gain; but the record thereof is of great worth; and whoso shall bring it to light, him will the Lord bless.

ຊ ເພາະວ່າບໍ່ມີຜູ້ໃດທີ່ມີອຳນາດນຳມັນໄປສູ່ຄວາມສະຫວ່າງໄດ້ ນອກຈາກພຣະເຈົ້າຈະປະທານໃຫ້ແກ່ຜູ້ນັ້ນເທົ່ານັ້ນ; ເພາະ ພຣະເຈົ້າມີພຣະປະສົງວ່າ ມັນຈະເປັນໄປເພາະການທີ່ ເຫັນແກ່ ລັດສະໝີພາບຂອງພຣະອົງແຕ່ຢ່າງດຽວ, ຫລື ເພື່ອຄວາມ ຜາສຸກຂອງຜູ້ຄົນແຫ່ງພັນທະສັນຍາຂອງພຣະຜູ້ເປັນເຈົ້າໃນ ສະໄໝບູຮານ ແລະ ເພື່ອຜູ້ທີ່ໄດ້ແຕກກະຈັດກະຈາຍໄປດົນນານ ແລ້ວ.

For none can have power to bring it to light save it be given him of God; for God wills that it shall be done with an eye single to his glory, or the welfare of the ancient and long dispersed covenant people of the Lord.

ຊ ແລະ ຄົນທີ່ຈະນຳສິ່ງນີ້ມາຫາຄວາມສະຫວ່າງຍ່ອມເປັນສຸກ; ເພາະວ່າມັນຈະຖືກ ນຳອອກຈາກຄວາມມືດໄປຫາແສງ ສະຫວ່າງຕາມພຣະຄຳຂອງພຣະເຈົ້າ; ແທ້ຈິງແລ້ວ, ມັນຈະຖືກ ນຳອອກມາຈາກດິນ, ແລະ ມັນຈະສ່ອງແສງສະຫວ່າງອອກ ຈາກຄວາມມືດ, ແລະ ມາສູ່ຄວາມຮູ້ຂອງຜູ້ຄົນ; ແລະ ມັນຈະ ເປັນໄປໂດຍອຳນາດຂອງພຣະເຈົ້າ.

And blessed be he that shall bring this thing to light; for it shall be brought out of darkness unto light, according to the word of God; yea, it shall be brought out of the earth, and it shall shine forth out of darkness, and come unto the knowledge of the people; and it shall be done by the power of God.

ແລະ ຖ້າຫາກມີ ຄວາມຜິດ ກໍເປັນຄວາມຜິດພາດຂອງ ມະນຸດ. ແຕ່ຈົ່ງເບິ່ງ, ພວກເຮົາຮູ້ວ່າມັນບໍ່ມີຄວາມຜິດ; ເຖິງ ຢ່າງໃດກໍຕາມ ພຣະເຈົ້າຮູ້ທຸກສິ່ງທຸກຢ່າງ; ສະນັ້ນ, ຜູ້ທີ່ ວິຈານ ກໍໃຫ້ຜູ້ນັ້ນລະວັງຕົວໄວ້ຢ້ານວ່າເຂົາຈະຢູ່ໃນອັນຕະລາຍຂອງໄຟ ນະລົກ.

ແລະ ຜູ້ທີ່ກ່າວວ່າ: ຈົ່ງສະແດງມັນຕໍ່ເຮົາ, ຖ້າບໍ່ດັ່ງນັ້ນທ່ານ ຈະຖືກລົງโทด—ກໍໃຫ້ຜູ້ນັ້ນລະວັງໄວ້ ຢ້ານວ່າເຂົາຈະສັ່ງໃນສິ່ງ ທີ່ພຣະຜູ້ເປັນເຈົ້າຊົງຫ້າມ.

ເພາະຈົ່ງເບິ່ງ, ຜູ້ໃດທີ່ ຕັດສິນຜູ້ອື່ນຢ່າງຮີບດ່ວນຈະຖືກ ຕັດສິນຢ່າງຮີບດ່ວນຄືກັນ; ເພາະວ່າເຂົາຈະໄດ້ຮັບຄ່າຈ້າງຕາມ ວຽກງານຂອງເຂົາ; ສະນັ້ນ, ຄົນທີ່ທຳຮ້າຍຄົນອື່ນ ຍ່ອມຖືກ ພຣະຜູ້ເປັນເຈົ້າທຳຮ້າຍຄືກັນ.

ຈົ່ງເບິ່ງສິ່ງທີ່ຂໍ້ຄວາມພຣະຄຳພີກ່າວໄວ້ຄື—ມະນຸດບໍ່ຄວນ ທຳຮ້າຍຕໍ່ກັນ, ທັງພວກເຂົາບໍ່ຄວນຕັດສິນກັນ; ເພາະວ່າການ ຕັດສິນນັ້ນເປັນຂອງເຮົາ, ພຣະຜູ້ເປັນເຈົ້າໄດ້ກ່າວ, ແລະ ການ ແກ້ແຄ້ນເປັນຂອງເຮົານຳອີກ, ແລະ ເຮົາຈະເປັນຜູ້ຕອບແທນ.

ແລະ ຜູ້ໃດທີ່ເວົ້າໂດຍສະແດງຄວາມໂມโທ ແລະ ຕໍ່ຕ້ານ ວຽກງານຂອງພຣະຜູ້ເປັນເຈົ້າ, ແລະ ກໍ່ກວນຜູ້ຄົນແຫ່ງພັນທະ ສັນຍາຂອງພຣະຜູ້ເປັນເຈົ້າ ຜູ້ເປັນເຊື້ອສາຍອິດສະຣາເອນ, ແລະ ກ່າວວ່າ: ພວກເຮົາຈະທຳລາຍວຽກງານຂອງພຣະຜູ້ເປັນ ເຈົ້າ, ແລະ ພຣະຜູ້ເປັນເຈົ້າຈະບໍ່ຈື່ຈຳພັນທະສັນຍາຂອງ ພຣະອົງ ຊຶ່ງໄດ້ເຮັດໄວ້ກັບເຊື້ອສາຍອິດສະຣາເອນດອກ—ຜູ້ ດຽວກັນນັ້ນກໍຢູ່ໃນຂັ້ນອັນຕະລາຍທີ່ຈະຖືກໂຄ່ນລົງ ແລະ ໂຍນ ເຂົ້າກອງໄຟ;

ເພາະວ່າ ຈຸດປະສົງອັນເປັນນິລັນດອນຂອງພຣະຜູ້ເປັນເຈົ້າ ຈະດຳເນີນຕໍ່ໄປ, ຈົນກວ່າຄຳສັນຍາຂອງພຣະອົງຈະສຳເລັດ ທັງໝົດ.

ຈົ່ງຄົ້ນຄວ້າຄຳທຳນາຍຂອງ ເອຊາຢາ. ຈົ່ງເບິ່ງ, ຂ້າພະເຈົ້າ ຂຽນໄວ້ບໍ່ໄດ້. ແທ້ຈິງແລ້ວ, ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບທ່ານວ່າ ໄພ່ພົນຂອງພຣະເຈົ້າຜູ້ທີ່ຈາກໄປກ່ອນຂ້າພະເຈົ້າ ຜູ້ທີ່ເຄີຍເປັນ ເຈົ້າຂອງແຜ່ນດິນນີ້ ຈະຕ້ອງ ທູນຂໍຕໍ່ພຣະຜູ້ເປັນເຈົ້າ, ແທ້ຈິງ ແລ້ວ, ແມ່ນຈາກພື້ນດິນ; ແລະ ຕາບໃດທີ່ພຣະຜູ້ເປັນເຈົ້າຊົງ ພຣະຊົນຢູ່ ພຣະອົງຈະນຶກເຖິງພັນທະສັນຍາທີ່ພຣະອົງໄດ້ເຮັດ ໄວ້ກັບພວກເຂົາ.

And if there be faults they be the faults of a man. But behold, we know no fault; nevertheless God knoweth all things; therefore, he that condemneth, let him be aware lest he shall be in danger of hell fire.

And he that saith: Show unto me, or ye shall be smitten—let him beware lest he commandeth that which is forbidden of the Lord.

For behold, the same that judgeth rashly shall be judged rashly again; for according to his works shall his wages be; therefore, he that smiteth shall be smitten again, of the Lord.

Behold what the scripture says—man shall not smite, neither shall he judge; for judgment is mine, saith the Lord, and vengeance is mine also, and I will repay.

And he that shall breathe out wrath and strifes against the work of the Lord, and against the covenant people of the Lord who are the house of Israel, and shall say: We will destroy the work of the Lord, and the Lord will not remember his covenant which he hath made unto the house of Israel—the same is in danger to be hewn down and cast into the fire;

For the eternal purposes of the Lord shall roll on, until all his promises shall be fulfilled.

Search the prophecies of Isaiah. Behold, I cannot write them. Yea, behold I say unto you, that those saints who have gone before me, who have possessed this land, shall cry, yea, even from the dust will they cry unto the Lord; and as the Lord liveth he will remember the covenant which he hath made with them.

๘๔ ແລະ ພຣະອົງຮູ້ເຖິງ ຄຳອະທິຖານຂອງພວກເຂົາ ວ່າມັນເປັນ ໄປເພື່ອພີ່ນ້ອງຂອງພວກເຂົາ. ແລະ ພຣະອົງຮູ້ຈັກສັດທາຂອງ ພວກເຂົາ, ເພາະໃນພຣະນາມຂອງພຣະອົງ ພວກເຂົາຈົ່ງ ສາມາດເຄື່ອນຍ້າຍ ພູໄດ້; ແລະ ໃນພຣະນາມຂອງພຣະອົງ ພວກເຂົາຈົ່ງສາມາດເຮັດໃຫ້ແຜ່ນດິນໂລກສັ່ນສະເທືອນໄດ້, ແລະ ໂດຍອຳນາດແຫ່ງພຣະຄຳຂອງພຣະອົງ ພວກເຂົາຈົ່ງໄດ້ ເຮັດ ຄຸກພັງທະລາຍລົງກັບພື້ນດິນ; ແທ້ຈິງແລ້ວ, ແມ່ນແຕ່ ເຕົາໄຟຮ້ອນແຮງ ທັງສັດປ່າ ແລະ ງູພິດ ກໍຍັງເຮັດອັນຕະລາຍ ໃຫ້ພວກເຂົາບໍ່ໄດ້, ເພາະອຳນາດແຫ່ງຄຳຂອງພຣະອົງ.

And he knoweth their prayers, that they were in behalf of their brethren. And he knoweth their faith, for in his name could they remove mountains; and in his name could they cause the earth to shake; and by the power of his word did they cause prisons to tumble to the earth; yea, even the fiery furnace could not harm them, neither wild beasts nor poisonous serpents, because of the power of his word.

๘๕ ແລະ ຈົ່ງເບິ່ງ, ຄຳອະທິຖານຂອງຄົນເຫລົ່ານັ້ນເປັນໄປເພື່ອ ຄົນຜູ້ທີ່ພຣະຜູ້ເປັນເຈົ້າຈະຍອມໃຫ້ນຳເອົາສິ່ງເຫລົ່ານີ້ອອກມາ.

And behold, their prayers were also in behalf of him that the Lord should suffer to bring these things forth.

๘๖ ແລະ ບໍ່ມີຜູ້ໃດຈຳຕ້ອງເວົ້າວ່າມັນຈະບໍ່ມາເຖິງ, ເພາະມັນຈະ ມາຢ່າງແນ່ນອນ, ເພາະພຣະຜູ້ເປັນເຈົ້າໄດ້ກ່າວແລ້ວວ່າ ມັນຈະ ອອກຈາກແຜ່ນດິນໂດຍພຣະຫັດຂອງພຣະຜູ້ເປັນເຈົ້າ, ແລະ ບໍ່ມີຜູ້ໃດຈະຢັບຢັ້ງໄດ້; ແລະ ມັນຈະມາໃນມື້ທີ່ຜູ້ຄົນເວົ້າກັນວ່າ ສິ່ງມະຫັດສະຈັນໝົດໄປແລ້ວ; ແລະ ມັນຈະມາຄືກັນກັບວ່າ ຜູ້ໃດຜູ້ໜຶ່ງຈະເວົ້າອອກ ຈາກຄົນຕາຍ.

And no one need say they shall not come, for they surely shall, for the Lord hath spoken it; for out of the earth shall they come, by the hand of the Lord, and none can stay it; and it shall come in a day when it shall be said that miracles are done away; and it shall come even as if one should speak from the dead.

๘๗ ແລະ ມັນຈະມາໃນມື້ທີ່ ເລືອດຂອງໄພ່ພົນຂອງພຣະເຈົ້າຈະ ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ, ເພາະ ການມົ້ວສຸມລັບ ແລະ ວຽກງານແຫ່ງຄວາມມືດ.

And it shall come in a day when the blood of saints shall cry unto the Lord, because of secret combinations and the works of darkness.

๘๘ ແທ້ຈິງແລ້ວ, ມັນຈະມາໃນມື້ທີ່ອຳນາດຂອງພຣະເຈົ້າຈະຖືກ ປະຕິເສດ, ແລະ ສາດສະໜາຈັກຕ່າງໆກັບມາເສື່ອມຄວາມ ສັກສິດ ແລະ ລະເມີເພີ້ຝັນດ້ວຍຄວາມທະນົງໃຈ; ແທ້ຈິງແລ້ວ, ແມ່ນໃນວັນທີ່ຜູ້ນຳຂອງສາດສະໜາຈັກ ແລະ ຜູ້ສອນຈະ ລຸກຂຶ້ນໃນຄວາມທະນົງໃຈຂອງຕົນ, ຈົນເຖິງການອິດສາ ບັງບຽດຜູ້ຄົນທີ່ເປັນຂອງສາດສະໜາຈັກຂອງຄົນອື່ນ.

Yea, it shall come in a day when the power of God shall be denied, and churches become defiled and be lifted up in the pride of their hearts; yea, even in a day when leaders of churches and teachers shall rise in the pride of their hearts, even to the envying of them who belong to their churches.

๘๙ ແທ້ຈິງແລ້ວ, ມັນຈະມາໃນມື້ ທີ່ຈະໄດ້ຍິນເຖິງເລື່ອງໄຟ, ແລະ ພະຍຸຝົນຟ້າຄະນອງ, ແລະ ອາຍຄວັນໃນຕ່າງແດນ;

Yea, it shall come in a day when there shall be heard of fires, and tempests, and vapors of smoke in foreign lands;

๙๐ ແລະ ຈະໄດ້ຍິນເຖິງເລື່ອງ ສົງຄາມ, ຂ່າວລືເລື່ອງສົງຄາມ, ແລະ ແຜ່ນດິນໄຫວໃນບ່ອນຕ່າງໆນຳອີກ.

And there shall also be heard of wars, rumors of wars, and earthquakes in divers places.

๙๑ ແທ້ຈິງແລ້ວ, ມັນຈະມາໃນມື້ທີ່ຈະມີສິ່ງສົກກະປົກທີ່ສຸດຢູ່ ເທິງໜ້າແຜ່ນດິນໂລກ; ມັນຈະມີການຄາດຕະກຳ, ແລະ ການ ປຸ້ນຈີ້, ແລະ ການເວົ້າຕົວະ, ແລະ ການຫລອກລວງ, ແລະ ການ ໂສເພນີ, ແລະ ການກະທຳທີ່ເປັນໜ້າກຽດຊັງນາໆປະການ; ຈະ ເປັນເວລາທີ່ຈະມີຫລາຍຄົນກ່າວວ່າ ເຮັດແນວນີ້ ຫລື ເຮັດແນວ ນັ້ນໂລດ, ແລະ ມັນຈະບໍ່ ເປັນຫຍັງດອກ, ເພາະພຣະຜູ້ເປັນເຈົ້າ ຈະ ສົ່ງເສີມການກະທຳເຊັ່ນນີ້ໃນວັນສຸດທ້າຍ. ແຕ່ວິບັດແກ່ຄົນ ເຊັ່ນນັ້ນ, ເພາະວ່າເຂົາຢູ່ໃນ ນ້ຳບີແຫ່ງຄວາມຂົມຂື່ນ ແລະ ໃນ ພັນທະການແຫ່ງຄວາມຊົ່ວຮ້າຍ.

Yea, it shall come in a day when there shall be great pollutions upon the face of the earth; there shall be murders, and robbing, and lying, and deceivings, and whoredoms, and all manner of abominations; when there shall be many who will say, Do this, or do that, and it mattereth not, for the Lord will uphold such at the last day. But wo unto such, for they are in the gall of bitterness and in the bonds of iniquity.

ມ.ດ ແທ້ຈິງແລ້ວ, ມັນຈະມາໃນມື້ທີ່ຈະມີສາດສະໜາຈັກຕ່າງໆ ຖືກສ້າງຂຶ້ນ ຊຶ່ງກ່າວว່າ: ຈົ່ງມາຫາເຮົາ, ແລະ ດ້ວຍເງິນຂອງ ທ່ານ, ທ່ານຈະໄດ້ຮັບການອະໄພຈາກບາບຂອງທ່ານ.

ມ.ມ ໂອ້ ທ່ານຜູ້ເປັນຄົນຊົ່ວ ແລະ ເສຍຄົນ ແລະ ແຂງຄໍເອີຍ, ດ້ວຍ ເຫດໃດທ່ານຈຶ່ງສ້າງສາດສະໜາຈັກໃຫ້ຕົນເອງເພື່ອຫາ ຜົນ ປະ�โຫຍດ? ດ້ວຍເຫດໃດທ່ານຈຶ່ງ ປ່ຽນພຣະຄຳອັນສັກສິດຂອງ ພຣະເຈົ້າ ເພື່ອທ່ານຈະໄດ້ນຳເອົາ ຄວາມອັບປະ�โຫຍດມາໃຫ້ ຈິດວິນຍານຂອງທ່ານ? ຈົ່ງເບິ່ງ, ທ່ານຈົ່ງພິຈາລະນາການ ເປີດເຜີຍຂອງພຣະເຈົ້າ; ເພາະຈົ່ງເບິ່ງ, ເວລາຍ່ອມມາເຖິງໃນມື້ ນັ້ນ ສິ່ງເຫລົ່ານີ້ຕ້ອງສຳເລັດທັງໝົດ.

ມ.ຄ ຈົ່ງເບິ່ງ, ພຣະຜູ້ເປັນເຈົ້າໄດ້ສະແດງເລື່ອງຍິ່ງໃຫຍ່ ແລະ ໜ້າ ອັດສະຈັນກ່ຽວກັບສິ່ງທີ່ຈະຕ້ອງມາໃນບໍ່ຊ້ານີ້ ແກ່ຂ້າພະເຈົ້າ, ເພາະຈົ່ງເບິ່ງ ເມື່ອເວລາມາເຖິງໃນມື້ນັ້ນ ສິ່ງເຫລົ່ານີ້ຈະອອກມາ ໃນບັນດາພວກທ່ານ.

ມ.ງ ຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບທ່ານຄືກັບว່າທ່ານຢູ່ຕໍ່ໜ້າ ຂ້າພະເຈົ້າ, ແຕ່ว່າທ່ານບໍ່ໄດ້ຢູ່. ແຕ່ຈົ່ງເບິ່ງ, ພຣະເຢຊູຄຣິດໄດ້ ສະແດງໃຫ້ຂ້າພະເຈົ້າເຫັນທ່ານ, ແລະ ຂ້າພະເຈົ້າຮູ້ຈັກການ ກະທຳຂອງທ່ານ.

ມ.ຈ ແລະ ຂ້າພະເຈົ້າຮູ້ว່າ ທ່ານໄດ້ ເດີນໄປໃນຄວາມທະນົງໃຈ ຂອງທ່ານ; ແລະ ມີພຽງບໍ່ເທົ່າໃດຄົນເທົ່ານັ້ນທີ່ບໍ່ໄດ້ ຍົກ ຕົນເອງຂຶ້ນໃນຄວາມທະນົງໃຈຂອງຕົນ ຈົນເຖິງການນຸ່ງ ເສື້ອຜ້າທີ່ສວຍງາມຫລາຍ, ຈົນເຖິງຂັ້ນມີການອິດສາບັງບຽດ, ແລະ ການຜິດຖຽງກັນ, ແລະ ມີເຈດຕະນາຮ້າຍຕໍ່ກັນ, ແລະ ຂົ່ມເຫັງ, ແລະ ເຮັດຄວາມຊົ່ວຮ້າຍນາໆປະການ; ແລະ ທັງ ສາດສະໜາຈັກຂອງທ່ານ, ແທ້ຈິງແລ້ວ, ທຸກໆບ່ອນກັບມາ ສົກກະປົກເພາະຄວາມທະນົງໃຈຂອງທ່ານ.

ມ.ຊ ເພາະຈົ່ງເບິ່ງ, ທ່ານຮັກ ເງິນ, ແລະ ຮັກເຂົ້າຂອງ ຂອງທ່ານ, ແລະ ຮັກເສື້ອຜ້າທີ່ສວຍງາມຫລາຍຂອງທ່ານ, ແລະ ການ ຕົກແຕ່ງສາດສະໜາຈັກຂອງທ່ານຫລາຍກວ່າທີ່ທ່ານຮັກຄົນ ຍາກຈົນ ແລະ ຄົນຂັດສົນ, ຄົນເຈັບປ່ວຍ, ແລະ ຄົນທີ່ເປັນທຸກ.

ມ.ຊ.ດ ໂອ້ ທ່ານຄົນສົກກະປົກ, ທ່ານຄົນໜ້າຊື່ໃຈຄົດ, ທ່ານຜູ້ສອນ, ຜູ້ຊຶ່ງຂາຍຕົວເພື່ອສິ່ງທີ່ຈະເນົ່າເປື່ອຍໄດ້, ດ້ວຍເຫດໃດທ່ານຈຶ່ງ ເຮັດໃຫ້ສາດສະໜາຈັກທີ່ບໍລິສຸດຂອງພຣະເຈົ້ານັ້ນສົກກະປົກ? ດ້ວຍເຫດໃດທ່ານຈຶ່ງ ອັບອາຍທີ່ຈະຮັບເອົາພຣະນາມຂອງ ພຣະຄຣິດ? ດ້ວຍເຫດໃດທ່ານຈຶ່ງບໍ່ຄິດว່າຄຸນຄ່າຂອງຄວາມ ສຸກອັນບໍ່ມີບ່ອນຈົບນັ້ນສຳຄັນກວ່າ ຄວາມທຸກທໍລະມານຊຶ່ງບໍ່ ເຄີຍຕາຍ—ຍ້ອນว່າ ຄຳສັນລະເສີນຂອງໂລກບໍ?

ມ.ດ ດ້ວຍເຫດໃດທ່ານຈຶ່ງຕົກແຕ່ງຕົວດ້ວຍສິ່ງທີ່ບໍ່ມີຊີວິດ, ແລະ ຍັງຍອມໃຫ້ຄົນຫິວໂຫຍ, ແລະ ຄົນຂັດສົນ, ແລະ ຄົນເປືອຍເປົ່າ, ແລະ ຄົນເຈັບປ່ວຍ, ແລະ ຄົນທີ່ເປັນທຸກຜ່ານທ່ານໄປ, ແລະ ບໍ່ ຫລຽວແລພວກເຂົາ?

Yea, it shall come in a day when there shall be churches built up that shall say: Come unto me, and for your money you shall be forgiven of your sins.

O ye wicked and perverse and stiffnecked people, why have ye built up churches unto yourselves to get gain? Why have ye transfigured the holy word of God, that ye might bring damnation upon your souls? Behold, look ye unto the revelations of God; for behold, the time cometh at that day when all these things must be fulfilled.

Behold, the Lord hath shown unto me great and marvelous things concerning that which must shortly come, at that day when these things shall come forth among you.

Behold, I speak unto you as if ye were present, and yet ye are not. But behold, Jesus Christ hath shown you unto me, and I know your doing.

And I know that ye do walk in the pride of your hearts; and there are none save a few only who do not lift themselves up in the pride of their hearts, unto the wearing of very fine apparel, unto envying, and strifes, and malice, and persecutions, and all manner of iniquities; and your churches, yea, even every one, have become polluted because of the pride of your hearts.

For behold, ye do love money, and your substance, and your fine apparel, and the adorning of your churches, more than ye love the poor and the needy, the sick and the afflicted.

O ye pollutions, ye hypocrites, ye teachers, who sell yourselves for that which will canker, why have ye polluted the holy church of God? Why are ye ashamed to take upon you the name of Christ? Why do ye not think that greater is the value of an endless happiness than that misery which never dies—because of the praise of the world?

Why do ye adorn yourselves with that which hath no life, and yet suffer the hungry, and the needy, and the naked, and the sick and the afflicted to pass by you, and notice them not?

๔๐ ແທ້ຈິງແລ້ວ, ດ້ວຍເຫດໃດທ່ານຈຶ່ງສ້າງ ຄວາມໜ້າກຽດຊັງ ອັນລີ້ລັບຂຶ້ນເພື່ອຫາເງິນປະ�โຫຍດ, ແລະ ເຮັດໃຫ້ແມ່ໝ້າຍ ຕ້ອງໂສກເສົ້າຕໍ່ພຣະພັກຂອງພຣະຜູ້ເປັນເจ້າ, ແລະ ເຮັດໃຫ້ ເດັກກຳພ້າຕ້ອງໂສກເສົ້າຕໍ່ພຣະພັກຂອງພຣະຜູ້ເປັນເจ້າ, ແລະ ເຮັດໃຫ້ເລືອດພໍ່ຂອງພວກເຂົາ ແລະ ສາມີຂອງພວກເຂົາ ຕ້ອງຮ້ອງທູນຕໍ່ພຣະຜູ້ເປັນເจ້າຈາກພື້ນດິນ, ເພື່ອການ ແກ້ແຄ້ນເທິງຫົວຂອງທ່ານ?

Yea, why do ye build up your secret abominations to get gain, and cause that widows should mourn before the Lord, and also orphans to mourn before the Lord, and also the blood of their fathers and their husbands to cry unto the Lord from the ground, for vengeance upon your heads?

๔๑ ຈົ່ງເບິ່ງ, ດາບແຫ່ງການແກ້ແຄ້ນແຂວນຢູ່ເທິງຫົວທ່ານ; ແລະ ເວລາຈະມາເຖິງໃນບໍ່ຊ້ານີ້ ທີ່ພຣະອົງຈະ ແກ້ແຄ້ນທ່ານ ແທນເລືອດຂອງໄພ່ພົນຂອງພຣະເจົ້າ, ເພາະວ່າພຣະອົງຈະບໍ່ ທົນຕໍ່ການຮ້ອງຂໍຂອງພວກເຂົາອີກຕໍ່ໄປ.

Behold, the sword of vengeance hangeth over you; and the time soon cometh that he avengeth the blood of the saints upon you, for he will not suffer their cries any longer.

ມໍມອນ ດ

Mormon 9

ນ ແລະ ບັດນີ້, ຂ້າພະເຈົ້າຂໍເວົ້າກ່ຽວກັບຄົນທີ່ບໍ່ເຊື່ອໃນພຣະຄຣິດ ນຳອີກ.

And now, I speak also concerning those who do not believe in Christ.

ຄ ຈົ່ງເບິ່ງ, ທ່ານຈະເຊື່ອໃນມື້ແຫ່ງການສະເດັດມາຢ້ຽມຢາມ ທ່ານຫລືບໍ່—ຈົ່ງເບິ່ງ, ເວລາພຣະຜູ້ເປັນເຈົ້າສະເດັດມາ, ແທ້ຈິງ ແລ້ວ, ແມ່ນໃນ ວັນອັນຍິ່ງໃຫຍ່ນັ້ນ ເມື່ອ ແຜ່ນດິນໂລກຈະຖືກກໍ້ ເຂົ້າກັນຄືກັນກັບມ້ວນກະດາດ, ແລະ ທາດຕ່າງໆຈະ ລະລາຍ ດ້ວຍຄວາມຮ້ອນອັນແຮງກ້າ, ແທ້ຈິງແລ້ວ, ໃນມື້ຍິ່ງໃຫຍ່ນັ້ນ ທ່ານຈະຖືກນຳມາຢືນຢູ່ຕໍ່ໜ້າພຣະພັກຂອງພຣະເມສານ້ອຍ ຂອງພຣະເຈົ້າ—ເວລານັ້ນທ່ານຈະກ່າວບໍ່ວ່າບໍ່ມີພຣະເຈົ້າ?

Behold, will ye believe in the day of your visitation—behold, when the Lord shall come, yea, even that great day when the earth shall be rolled together as a scroll, and the elements shall melt with fervent heat, yea, in that great day when ye shall be brought to stand before the Lamb of God—then will ye say that there is no God?

ງ ເວລານັ້ນທ່ານຍັງຈະປະຕິເສດພຣະຄຣິດອີກຢູ່ບໍ ຫລື ທ່ານ ຈະສາມາດຫລຽວເບິ່ງພຣະເມສານ້ອຍຂອງພຣະເຈົ້າໄດ້ບໍ? ທ່ານຄິດບໍ່ວ່າທ່ານຈະສາມາດຢູ່ກັບພຣະອົງພາຍໃຕ້ຄວາມ ສຳນຶກຜິດຂອງທ່ານໄດ້? ທ່ານຄິດບໍ່ວ່າ ທ່ານຈະມີຄວາມສຸກທີ່ ຈະຢູ່ກັບພຣະອົງຜູ້ບໍລິສຸດອົງນັ້ນໄດ້ ເມື່ອຈິດວິນຍານຂອງທ່ານ ທໍລະມານຢູ່ດ້ວຍຄວາມສຳນຶກຜິດວ່າ ທ່ານເຄີຍເຮັດຜິດຕໍ່ກົດ ຂອງພຣະອົງ?

Then will ye longer deny the Christ, or can ye behold the Lamb of God? Do ye suppose that ye shall dwell with him under a consciousness of your guilt? Do ye suppose that ye could be happy to dwell with that holy Being, when your souls are racked with a consciousness of guilt that ye have ever abused his laws?

ຈ ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບທ່ານว່າ ທ່ານຈະທຸກທໍລະມານ ໃຈທີ່ຈະຢູ່ກັບພຣະເຈົ້າຜູ້ບໍລິສຸດ ແລະ ທ່ຽງທຳພາຍໃຕ້ຄວາມ ສຳນຶກຜິດໃນຄວາມສົກກະປົກຂອງທ່ານຕໍ່ພຣະພັກຂອງ ພຣະອົງ, ຍິ່ງກວ່າທ່ານຈະຢູ່ກັບຈິດວິນຍານທີ່ ອັບປະໂຫຍດໃນ ນະລົກ.

Behold, I say unto you that ye would be more miserable to dwell with a holy and just God, under a consciousness of your filthiness before him, than ye would to dwell with the damned souls in hell.

ສ ເພາະຈົ່ງເບິ່ງ, ເມື່ອທ່ານຖືກນຳມາໃຫ້ເຫັນ ຄວາມເປືອຍເປົ່າ ຂອງທ່ານຕໍ່ພຣະພັກຂອງພຣະເຈົ້າ, ແລະ ໃຫ້ເຫັນລັດສະໝີ ພາບຂອງພຣະເຈົ້ານຳອີກ, ແລະ ໃຫ້ເຫັນຄວາມບໍລິສຸດຂອງ ພຣະເຢຊູຄຣິດ, ມັນຈະເຮັດໃຫ້ເກີດແປວໄຟທີ່ບໍ່ຮູ້ມອດຢູ່ໃນຕົວ ທ່ານ.

For behold, when ye shall be brought to see your nakedness before God, and also the glory of God, and the holiness of Jesus Christ, it will kindle a flame of unquenchable fire upon you.

ຊ ໂອ້ ແລ້ວທ່ານ ຜູ້ບໍ່ເຊື່ອ, ທ່ານຈົ່ງ ຫັນມາຫາພຣະຜູ້ເປັນ ເຈົ້າ; ຈົ່ງທູນຂໍຕໍ່ພຣະບິດາຢ່າງສຸດກຳລັງໃນພຣະນາມຂອງ ພຣະເຢຊູ ເພື່ອທ່ານອາດຈະພົບວ່າທ່ານບໍ່ມີມົນທິນ ມີແຕ່ ຄວາມບໍລິສຸດ, ຄວາມງາມ, ແລະ ຄວາມຂາວ, ໂດຍຖືກເຮັດໃຫ້ ສະອາດແລ້ວດ້ວຍໂລຫິດຂອງ ພຣະເມສານ້ອຍໃນວັນອັນຍິ່ງ ໃຫຍ່ ແລະ ສຸດທ້າຍນັ້ນ.

O then ye unbelieving, turn ye unto the Lord; cry mightily unto the Father in the name of Jesus, that perhaps ye may be found spotless, pure, fair, and white, having been cleansed by the blood of the Lamb, at that great and last day.

ຍ ແລະ ອີກເທື່ອໜຶ່ງ ຂ້າພະເຈົ້າຂໍເວົ້າກັບທ່ານຜູ້ ປະຕິເສດ ການເປີດເຜີຍຂອງພຣະເຈົ້າ, ແລະ ເວົ້າວ່າມັນໝົດໄປແລ້ວ, ວ່າ ບໍ່ມີການເປີດເຜີຍ, ຫລື ການທຳນາຍ, ຫລື ຂອງປະທານ, ຫລື ການປິ່ນປົວ, ຫລື ການເວົ້າດ້ວຍພາສາອື່ນ, ແລະ ການແປ ຄວາມໝາຍຂອງພາສາອື່ນ;

And again I speak unto you who deny the revelations of God, and say that they are done away, that there are no revelations, nor prophecies, nor gifts, nor healing, nor speaking with tongues, and the interpretation of tongues;

໘ ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບທ່ານວ່າ ຄົນທີ່ປະຕິເສດສິ່ງເຫລົ່ານີ້ບໍ່ຮູ້ຈັກ ພຣະກິດຕິຄຸນຂອງພຣະຄຣິດ; ແທ້ຈິງແລ້ວ, ເຂົາບໍ່ໄດ້ອ່ານພຣະຄຳພີ; ຖ້າຫາກອ່ານ ເຂົາກໍບໍ່ ເຂົ້າໃຈມັນ.

Behold I say unto you, he that denieth these things knoweth not the gospel of Christ; yea, he has not read the scriptures; if so, he does not understand them.

໙ ເຮົາບໍ່ໄດ້ອ່ານບໍວ່າ ພຣະເຈົ້າເປັນ ເໝືອນກັນເຊັ່ນມື້ວານນີ້, ມື້ນີ້, ແລະ ຕະຫລອດການ, ແລະ ໃນພຣະອົງບໍ່ມີຄວາມຜັນແປທັງບໍ່ມີເງົາຂອງຄວາມປ່ຽນແປງເລີຍ?

For do we not read that God is the same yesterday, today, and forever, and in him there is no variableness neither shadow of changing?

໑໐ ແລະ ບັດນີ້, ຖ້າຫາກທ່ານນຶກຄິດໃຫ້ຕົວເອງເຖິງພຣະເຈົ້າທີ່ຜັນແປໄດ້, ແລະ ໃນພຣະເຈົ້ານັ້ນມີເງົາຂອງຄວາມປ່ຽນແປງເວລານັ້ນທ່ານກໍນຶກຄິດໃຫ້ຕົນເອງເຖິງພຣະຜູ້ເປັນເຈົ້າຊຶ່ງບໍ່ແມ່ນພຣະເຈົ້າແຫ່ງສິ່ງມະຫັດສະຈັນ.

And now, if ye have imagined up unto yourselves a god who doth vary, and in whom there is shadow of changing, then have ye imagined up unto yourselves a god who is not a God of miracles.

໑໑ ແຕ່ຈົ່ງເບິ່ງ, ຂ້າພະເຈົ້າຈະສະແດງພຣະເຈົ້າແຫ່ງສິ່ງມະຫັດສະຈັນແກ່ທ່ານ, ເຖິງແມ່ນພຣະເຈົ້າຂອງອັບຣາຮາມ, ແລະ ພຣະເຈົ້າຂອງອີຊາກ, ແລະ ພຣະເຈົ້າຂອງຢາໂຄບ; ແລະ ຄືພຣະເຈົ້າອົງດຽວກັນນັ້ນທີ່ສ້າງຟ້າສະຫວັນ ແລະ ແຜ່ນດິນໂລກ, ແລະ ທຸກສິ່ງທຸກຢ່າງທີ່ຢູ່ໃນນັ້ນ.

But behold, I will show unto you a God of miracles, even the God of Abraham, and the God of Isaac, and the God of Jacob; and it is that same God who created the heavens and the earth, and all things that in them are.

໑໒ ຈົ່ງເບິ່ງ, ພຣະອົງໄດ້ສ້າງອາດາມ, ແລະ ເປັນຍ້ອນ ອາດາມການຕົກຂອງມະນຸດຈຶ່ງມີມາ. ແລະ ເປັນຍ້ອນການຕົກຂອງມະນຸດ ພຣະເຢຊູຄຣິດຈຶ່ງສະເດັດມາ, ຜູ້ເປັນພຣະບິດາ ແລະພຣະບຸດ; ແລະ ເປັນຍ້ອນພຣະເຢຊູຄຣິດ ການໄຖ່ຂອງມະນຸດຈຶ່ງມີມາ.

Behold, he created Adam, and by Adam came the fall of man. And because of the fall of man came Jesus Christ, even the Father and the Son; and because of Jesus Christ came the redemption of man.

໑໓ ແລະ ເປັນຍ້ອນການໄຖ່ຂອງມະນຸດ, ຊຶ່ງມາໂດຍພຣະເຢຊູຄຣິດ, ຄົນທັງຫລາຍຈຶ່ງຖືກນຳກັບໄປຫາທີ່ປະທັບຂອງພຣະຜູ້ເປັນເຈົ້າ; ແທ້ຈິງແລ້ວ, ດ້ວຍການນີ້ມະນຸດທັງປວງຈຶ່ງຖືກໄຖ່, ເປັນຍ້ອນການສິ້ນພຣະຊົນຂອງພຣະຄຣິດ ຈຶ່ງເຮັດໃຫ້ເກີດ ການຟື້ນຄືນຊີວິດ, ຊຶ່ງເຮັດໃຫ້ເກີດການໄຖ່ເພື່ອໃຫ້ພົ້ນຈາກການ ນອນຫລັບອັນບໍ່ມີວັນສິ້ນສຸດ, ຊຶ່ງເມື່ອເວລາສຽງແກດັງຂຶ້ນ ອຳນາດຂອງພຣະເຈົ້າຈະປຸກມະນຸດທັງປວງໃຫ້ຕື່ນຈາກການນອນຫລັບ; ແລະ ຄົນທັງຫລາຍຈະອອກມາ ທັງຜູ້ນ້ອຍ ແລະ ຜູ້ໃຫຍ່, ແລະ ທຸກຄົນຈະຢືນຢູ່ຕໍ່ໜ້າບ່ອນພິພາກສາຂອງພຣະອົງ ໂດຍຖືກໄຖ່ ແລະ ຫລຸດຈາກ ສາຍຮັດແຫ່ງຄວາມຕາຍຊົ່ວນິລັນດອນ, ຊຶ່ງຄວາມຕາຍນັ້ນເປັນຄວາມຕາຍທາງໂລກ.

And because of the redemption of man, which came by Jesus Christ, they are brought back into the presence of the Lord; yea, this is wherein all men are redeemed, because the death of Christ bringeth to pass the resurrection, which bringeth to pass a redemption from an endless sleep, from which sleep all men shall be awakened by the power of God when the trump shall sound; and they shall come forth, both small and great, and all shall stand before his bar, being redeemed and loosed from this eternal band of death, which death is a temporal death.

໑໔ ແລະ ເວລານັ້ນ ການພິພາກສາຂອງພຣະຜູ້ບໍລິສຸດຈະມາຫາພວກເຂົາ; ແລະ ເວລານັ້ນຄົນທີ່ ສົກກະປົກຈະຄົງສົກກະປົກຢູ່ຄືເກົ່າ; ແລະ ຄົນທີ່ຊອບທຳຈະຄົງຊອບທຳຢູ່ຄືເກົ່າ; ແລະ ຄົນທີ່ເປັນສຸກຈະຄົງເປັນສຸກຢູ່ຄືເກົ່າ; ແລະ ຄົນທີ່ບໍ່ເປັນສຸກກໍຄົງບໍ່ເປັນສຸກຢູ່ຄືເກົ່າ.

And then cometh the judgment of the Holy One upon them; and then cometh the time that he that is filthy shall be filthy still; and he that is righteous shall be righteous still; he that is happy shall be happy still; and he that is unhappy shall be unhappy still.

ແລະ ບັດນີ້, ໂອ້ ທ່ານທັງຫລາຍທີ່ນິກຄິດໃຫ້ຕົນເອງວ່າ ພຣະເຈົ້າຈະເຮັດ ສິ່ງມະຫັດສະຈັນບໍ່ໄດ້, ຂ້າພະເຈົ້າຈະຖາມ ທ່ານວ່າ ສິ່ງທັງໝົດທີ່ຂ້າພະເຈົ້າເວົ້າມານີ້ເກີດຂຶ້ນແລ້ວບໍ? ເວລາສຸດທ້າຍມາຮອດແລ້ວບໍ? ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບ ທ່ານວ່າ ຍັງບໍ່ທັນມາຮອດເທື່ອ; ແລະ ພຣະເຈົ້າຍັງບໍ່ເຊົາເປັນ ພຣະເຈົ້າແຫ່ງສິ່ງມະຫັດສະຈັນເທື່ອ.

And now, O all ye that have imagined up unto yourselves a god who can do no miracles, I would ask of you, have all these things passed, of which I have spoken? Has the end come yet? Behold I say unto you, Nay; and God has not ceased to be a God of miracles.

ຈົ່ງເບິ່ງ, ສິ່ງທີ່ພຣະເຈົ້າກະທຳບໍ່ໄດ້ເປັນໜ້າມະຫັດສະຈັນ ແກ່ສາຍຕາຂອງພວກເຮົາບໍ? ແທ້ຈິງແລ້ວ, ແລະ ແມ່ນໃຜທີ່ຈະ ເຂົ້າໃຈ ວຽກງານອັນໜ້າອັດສະຈັນຂອງພຣະເຈົ້າໄດ້?

Behold, are not the things that God hath wrought marvelous in our eyes? Yea, and who can comprehend the marvelous works of God?

ຜູ້ໃດຈະເວົ້າວ່າ ມັນບໍ່ແມ່ນສິ່ງມະຫັດສະຈັນ ຊຶ່ງໂດຍ ພຣະຄຳຂອງພຣະອົງ ຟ້າສະຫວັນ ແລະ ແຜ່ນດິນໂລກຈຶ່ງຖືກ ສ້າງຂຶ້ນ; ແລະ ໂດຍອຳນາດຂອງຄຳຂອງພຣະຜູ້ສ້າງ ມະນຸດຈຶ່ງ ຖືກ ສ້າງຂຶ້ນດ້ວຍ ຂີ້ຝຸ່ນຂອງແຜ່ນດິນໂລກ; ແລະ ໂດຍອຳນາດ ຂອງຄຳຂອງພຣະອົງ ສິ່ງມະຫັດສະຈັນຈຶ່ງເກີດຂຶ້ນ?

Who shall say that it was not a miracle that by his word the heaven and the earth should be; and by the power of his word man was created of the dust of the earth; and by the power of his word have miracles been wrought?

ແລະ ຜູ້ໃດຈະເວົ້າວ່າ ພຣະເຢຊູຄຣິດບໍ່ໄດ້ເຮັດ ສິ່ງ ມະຫັດສະຈັນອັນຍິ່ງໃຫຍ່ຫລາຍຢ່າງ? ແລະ ມີສິ່ງ ມະຫັດສະຈັນອັນຍິ່ງໃຫຍ່ຫລາຍຢ່າງເກີດຂຶ້ນໂດຍມືຂອງ ອັກຄະສາວົກ.

And who shall say that Jesus Christ did not do many mighty miracles? And there were many mighty miracles wrought by the hands of the apostles.

ແລະ ຖ້າຫາກມີ ສິ່ງມະຫັດສະຈັນກະທຳຂຶ້ນໃນສະໄໝນັ້ນ, ດ້ວຍເຫດໃດພຣະເຈົ້າຈຶ່ງຈະເລີກເປັນພຣະເຈົ້າແຫ່ງສິ່ງ ມະຫັດສະຈັນ ແລະ ຍັງເປັນອົງຜູ້ບໍ່ປ່ຽນແປງຢູ່ໄປເລື້ອຍໆ? ແລະ ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບທ່ານວ່າ ພຣະອົງບໍ່ ປ່ຽນແປງ; ຖ້າຫາກມີການປ່ຽນແປງ ພຣະອົງຈະເລີກເປັນ ພຣະເຈົ້າ; ແລະ ພຣະອົງຈະບໍ່ເລີກເປັນພຣະເຈົ້າ, ແລະ ພຣະອົງ ເປັນພຣະເຈົ້າແຫ່ງສິ່ງມະຫັດສະຈັນຢູ່.

And if there were miracles wrought then, why has God ceased to be a God of miracles and yet be an unchangeable Being? And behold, I say unto you he changeth not; if so he would cease to be God; and he ceaseth not to be God, and is a God of miracles.

ແລະ ເຫດຜົນທີ່ພຣະອົງເລີກເຮັດ ສິ່ງມະຫັດສະຈັນໃນ ບັນດາລູກຫລານມະນຸດ ເປັນເພາະວ່າພວກເຂົາເສື່ອມໂຊມ ຢູ່ໃນຄວາມບໍ່ເຊື່ອຖື, ແລະ ອອກຈາກທິດທາງທີ່ຖືກຕ້ອງ, ແລະ ບໍ່ຮູ້ຈັກພຣະເຈົ້າຜູ້ຊຶ່ງພວກເຂົາຄວນ ໄວ້ວາງใจ.

And the reason why he ceaseth to do miracles among the children of men is because that they dwindle in unbelief, and depart from the right way, and know not the God in whom they should trust.

ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບທ່ານວ່າ ຜູ້ໃດກໍຕາມທີ່ເຊື່ອໃນ ພຣະຄຣິດ, ໂດຍບໍ່ສົງໄສຈັກດີ້, ສິ່ງໃດກໍຕາມທີ່ເຂົາຂໍຈາກ ພຣະບິດາໃນພຣະນາມຂອງພຣະຄຣິດ ເຂົາຈະໄດ້ຮັບສິ່ງນັ້ນ; ແລະ ຄຳສັນຍາມີກັບຄົນທັງປວງ, ເຖິງແມ່ນທີ່ສຸດຂອງ ແຜ່ນດິນໂລກ.

Behold, I say unto you that whoso believeth in Christ, doubting nothing, whatsoever he shall ask the Father in the name of Christ it shall be granted him; and this promise is unto all, even unto the ends of the earth.

ເພາະຈົ່ງເບິ່ງ, ພຣະເຢຊູຄຣິດພຣະບຸດຂອງພຣະເຈົ້າໄດ້ກ່າວ ດັ່ງນັ້ນກັບສານຸສິດຂອງພຣະອົງຜູ້ທີ່ຈະຄົງຢູ່ຕໍ່ໄປ, ແທ້ຈິງ ແລ້ວ, ແລະ ກັບສານຸສິດທັງໝົດຂອງພຣະອົງ ຊຶ່ງຝູງຊົນໄດ້ ຍິນວ່າ: ທ່ານຈົ່ງ ອອກໄປທົ່ວໂລກ, ແລະ ຈົ່ງສັ່ງສອນພຣະ ກິດຕິຄຸນໃຫ້ແກ່ມະນຸດທຸກຄົນ;

For behold, thus said Jesus Christ, the Son of God, unto his disciples who should tarry, yea, and also to all his disciples, in the hearing of the multitude: Go ye into all the world, and preach the gospel to every creature;

ແລະ ຄົນທີ່ເຊື່ອ ແລະ ຮັບບັບຕິສະມາຈະລອດ, ແຕ່ຄົນທີ່ບໍ່ ເຊື່ອຈະ ອັບປະໂຫຍດ;

And he that believeth and is baptized shall be saved, but he that believeth not shall be damned;

๘๔ ແລະ ເຄື່ອງໝາຍເຫລົ່ານີ້ຈະຕິດຕາມຄົນທີ່ເຊື່ອໄປ—ໃນນາມ ຂອງເຮົາ ເຂົາຈະຂັບໄລ່ ຜີສາດອອກໄປ; ເຂົາຈະເວົ້າອອກ ມາເປັນພາສາອື່ນ; ແລະ ເຂົາຈະຈັບງູໄດ້; ແລະ ຖ້າຫາກເຂົາດື່ມ ສິ່ງທີ່ເປັນພິດ ມັນຈະບໍ່ເປັນອັນຕະລາຍແກ່ເຂົາ; ເຂົາຈະເອົາ ມືວາງໃສ່ຄົນປ່ວຍໄຂ້ ແລະ ຄົນປ່ວຍຈະຫາຍດີ;

And these signs shall follow them that believe—in my name shall they cast out devils; they shall speak with new tongues; they shall take up serpents; and if they drink any deadly thing it shall not hurt them; they shall lay hands on the sick and they shall recover;

๘๕ ແລະ ຜູ້ໃດກໍຕາມທີ່ເຊື່ອໃນນາມຂອງເຮົາ, ໂດຍບໍ່ສົງໄສຈັກ ດີ້, ເຮົາຈະ ຢືນຢັນຄຳເວົ້າຂອງເຮົາທັງໝົດກັບເຂົາ, ເຖິງກັບ ທີ່ສຸດຂອງແຜ່ນດິນໂລກ.

And whosoever shall believe in my name, doubting nothing, unto him will I confirm all my words, even unto the ends of the earth.

๘๖ ແລະ ບັດນີ້, ຈົ່ງເບິ່ງຜູ້ໃດຈະສາມາດຢືນຕໍ່ຕ້ານວຽກງານ ຂອງພຣະຜູ້ເປັນເຈົ້າໄດ້? ຜູ້ໃດຈະສາມາດປະຕິເສດຄຳຂອງ ພຣະຜູ້ເປັນເຈົ້າໄດ້? ຜູ້ໃດຈະລຸກຂຶ້ນຕໍ່ຕ້ານອຳນາດທີ່ຊົງລິດຍິ່ງ ໃຫຍ່ຂອງພຣະຜູ້ເປັນເຈົ້າ? ຜູ້ໃດຈະໝິ່ນປະໝາດວຽກງານ ຂອງພຣະຜູ້ເປັນເຈົ້າ? ຜູ້ໃດຈະດູໝິ່ນລູກໆຂອງພຣະຄຣິດ? ຈົ່ງ ເບິ່ງ, ທ່ານທັງຫລາຍຜູ້ ໝິ່ນປະໝາດວຽກງານຂອງພຣະຜູ້ ເປັນເຈົ້າ, ທ່ານນັ້ນແຫລະຈະແປກໃຈ ແລະ ຈະຕາຍ.

And now, behold, who can stand against the works of the Lord? Who can deny his sayings? Who will rise up against the almighty power of the Lord? Who will despise the works of the Lord? Who will despise the children of Christ? Behold, all ye who are despisers of the works of the Lord, for ye shall wonder and perish.

๘๗ ໂอ້ ດັ່ງນັ້ນແລ້ວ, ຈົ່ງຢ່າໄດ້ໝິ່ນປະໝາດເລີຍ, ແລະ ຢ່າໄດ້ ແປກໃຈເລີຍ, ແຕ່ຈົ່ງເຊື່ອຟັງພຣະຄຳຂອງພຣະຜູ້ເປັນເຈົ້າ ແລະ ໃຫ້ທູນຂໍພຣະບິດາໃນພຣະນາມຂອງພຣະເຢຊູ ເພື່ອສິ່ງໃດ ກໍຕາມທີ່ທ່ານຕ້ອງການ, ຢ່າສົງໄສເລີຍ, ແຕ່ຈົ່ງເຊື່ອ, ແລະ ເລີ່ມຕົ້ນຄືກັນກັບໃນຄາວກ່ອນ, ແລະ ມາຫາພຣະຜູ້ເປັນເຈົ້າ ດ້ວຍສຸດ ໃຈ, ແລະ ເຮັດວຽກງານຂອງຄວາມລອດໃຫ້ຕົນເອງ ດ້ວຍຄວາມຢ້ານກົວ ແລະ ຕົວສັ່ນຕໍ່ພຣະພັກຂອງພຣະອົງ.

O then despise not, and wonder not, but hearken unto the words of the Lord, and ask the Father in the name of Jesus for what things soever ye shall stand in need. Doubt not, but be believing, and begin as in times of old, and come unto the Lord with all your heart, and work out your own salvation with fear and trembling before him.

๘๘ ຈົ່ງ ສະຫລາດໃນວັນເວລາແຫ່ງການທົດລອງຂອງທ່ານ; ຈົ່ງ ເອົາຕົວອອກໃຫ້ຫ່າງໄກຈາກສິ່ງທີ່ບໍ່ສະອາດທັງໝົດ; ຢ່າໄດ້ຂໍ ເພື່ອທ່ານຈະໄດ້ໃຊ້ຈ່າຍເພື່ອ ຄວາມໄຄ່ຂອງທ່ານ, ແຕ່ໃຫ້ຂໍດ້ວຍ ຄວາມໝັ້ນຄົງອັນບໍ່ຫວັ່ນໄຫວ, ເພື່ອທ່ານຈະບໍ່ໄດ້ຍອມຕໍ່ການ ລໍ້ລວງ, ແຕ່ວ່າເພື່ອທ່ານຈະໄດ້ຮັບໃຊ້ ພຣະເຈົ້າອົງທີ່ທ່ຽງແທ້ ແລະ ຊົງພຣະຊົນຢູ່.

Be wise in the days of your probation; strip yourselves of all uncleanness; ask not, that ye may consume it on your lusts, but ask with a firmness unshaken, that ye will yield to no temptation, but that ye will serve the true and living God.

๘๙ ຈົ່ງເບິ່ງວ່າ ທ່ານຈະບໍ່ຮັບບັບຕິສະມາໂດຍ ບໍ່ມີຄ່າຄວນ; ຈົ່ງ ເບິ່ງວ່າທ່ານຈະບໍ່ຮັບສ່ວນສິນລະລึກຂອງພຣະຄຣິດໂດຍ ບໍ່ມີ ຄ່າຄວນ; ແຕ່ຈົ່ງເບິ່ງວ່າທ່ານຈະເຮັດທຸກສິ່ງທຸກຢ່າງດ້ວຍ ຄວາມ ມີຄ່າຄວນ, ແລະ ເຮັດໃນພຣະນາມຂອງພຣະເຢຊູຄຣິດ; ພຣະບຸດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່, ແລະ ຖ້າຫາກທ່ານ ເຮັດເຊັ່ນນີ້ ແລະ ອົດທົນຈົນເຖິງທີ່ສຸດ, ແລ້ວທ່ານຈະບໍ່ມີທາງທີ່ ຈະຖືກຂັບໄລ່ອອກໄປເລີຍ.

See that ye are not baptized unworthily; see that ye partake not of the sacrament of Christ unworthily; but see that ye do all things in worthiness, and do it in the name of Jesus Christ, the Son of the living God; and if ye do this, and endure to the end, ye will in nowise be cast out.

๙๐ ຈົ່ງເບິ່ງ, ຂ້າພະເຈົ້າເວົ້າກັບທ່ານຄືກັນກັບຂ້າພະເຈົ້າ ເວົ້າ ຈາກຄົນຕາຍ; ເພາະຂ້າພະເຈົ້າຮູ້ວ່າ ທ່ານຈະໄດ້ຍິນຄຳເວົ້າຂອງ ຂ້າພະເຈົ້າ.

Behold, I speak unto you as though I spake from the dead; for I know that ye shall have my words.

ມ١ ຢ່າໄດ້ກ່າວโทດຂ້າພະເຈົ້າຍ້ອນ ຄວາມຂາດຕົກບົກພ່ອງ ຂອງຂ້າພະເຈົ້າ, ທັງບິດາຂອງຂ້າພະເຈົ້າເພາະຄວາມຂາດຕົກ ບົກພ່ອງຂອງເພິ່ນ, ທັງຄົນທີ່ຂຽນໄວ້ກ່ອນເພິ່ນເລີຍ; ແຕ່ທາງ ທີ່ດີຈົ່ງຖວາຍຄວາມຂອບຄຸນແດ່ພຣະເຈົ້າທີ່ພຣະອົງໄດ້ສະແດງ ຄວາມຂາດຕົກບົກພ່ອງຂອງພວກເຮົາໃຫ້ປະຈັກແກ່ທ່ານ, ເພື່ອວ່າທ່ານຈະໄດ້ຮຽນຮູ້ໃຫ້ຮອບຄອບດີກວ່າທີ່ພວກເຮົາເປັນ ມາ.

ມ١ຂ ແລະ ບັດນີ້, ຈົ່ງເບິ່ງພວກເຮົາໄດ້ຂຽນບັນທຶກນີ້ຕາມຄວາມຮູ້ ຄວາມສາມາດຂອງພວກເຮົາ, ດ້ວຍອັກຂະລະຊຶ່ງເອີ້ນກັນໃນ ບັນດາພວກເຮົາວ່າ ພາສາເອຢິບທີ່ ປັບປຸງໃໝ່, ໂດຍໄດ້ຖືກ ມອບຕໍ່ໆກັນມາ ແລະ ປ່ຽນແປງໄປຕາມວິທີເວົ້າຂອງພວກເຂົາ.

ມ١ມ ແລະ ຖ້າຫາກແຜ່ນຈາລຶກຂອງພວກເຮົາໃຫຍ່ພໍ, ພວກເຮົາ ອາດຈະຂຽນເປັນພາສາເຮັບເຣີ; ແຕ່ພວກເຮົາກໍໄດ້ປ່ຽນແປງ ພາສາເຮັບເຣີນຳອີກ; ແລະ ຖ້າຫາກພວກເຮົາຂຽນເປັນພາສາ ເຮັບເຣີໄດ້, ຈົ່ງເບິ່ງ, ທ່ານຈະບໍ່ພົບຄວາມຂາດຕົກບົກພ່ອງໃນ ບັນທຶກຂອງພວກເຮົາເລີຍ.

ມ١ສ ແຕ່ພຣະຜູ້ເປັນເຈົ້າຮູ້ຈັກເລື່ອງທີ່ພວກເຮົາຂຽນໄວ້, ແລະ ຮູ້ ອີກວ່າ ບໍ່ມີບຸກຄົນອື່ນໃດຮູ້ພາສາຂອງພວກເຮົາ; ແລະ ດ້ວຍ ເຫດວ່າບໍ່ມີບຸກຄົນໃດຮູ້ພາສາຂອງພວກເຮົາ, ສະນັ້ນ ພຣະອົງ ຈົ່ງຈະຕຽມ ທາງເພື່ອການແປຄວາມໝາຍນັ້ນ.

ມ١ຫ ແລະ ເລື່ອງເຫລົ່ານີ້ມີຂຽນໄວ້ເພື່ອພວກເຮົາຈະໄດ້ກຳຈັດ ເລືອດຂອງພີ່ນ້ອງຜູ້ເສື່ອມໂຊມຢູ່ໃນ ຄວາມບໍ່ເຊື່ອຖືອອກຈາກ ອາພອນຂອງພວກເຮົາ.

ມ١ຬ ແລະ ຈົ່ງເບິ່ງ, ນີ້ຄືສິ່ງທີ່ພວກເຮົາ ປາດຖະໜາໃຫ້ກັບ ພີ່ນ້ອງຂອງພວກເຮົາ, ແທ້ຈິງແລ້ວ, ແມ່ນການກັບຄືນມາສູ່ ຄວາມຮູ້ເລື່ອງພຣະຄຣິດ, ອັນເປັນໄປຕາມຄຳອະທິຖານຂອງ ໄພ່ພົນຂອງພຣະເຈົ້າທັງໝົດຜູ້ທີ່ອາໄສຢູ່ໃນແຜ່ນດິນ.

ມ١ໄ ແລະ ຂໍອົງພຣະເຢຊູຄຣິດເຈົ້າຈົ່ງຍິນຍອມໃຫ້ຄຳອະທິຖານ ຂອງພວກເຂົາໄດ້ຮັບຄຳຕອບຕາມສັດທາຂອງພວກເຂົາ; ແລະ ຂໍໃຫ້ພຣະເຈົ້າອົງເປັນພຣະບິດາຈົ່ງນຶກເຖິງພັນທະສັນຍາ ຊຶ່ງ ພຣະອົງໄດ້ເຮັດໄວ້ກັບເຊື້ອສາຍອິດສະຣາເອນ; ແລະ ຂໍໃຫ້ ພຣະອົງຈົ່ງປະທານພອນໃຫ້ແກ່ພວກເຂົາຕະຫລອດການ, ໂດຍທາງສັດທາໃນພຣະນາມຂອງພຣະເຢຊູຄຣິດ. ອາແມນ.

Condemn me not because of mine imperfection, neither my father, because of his imperfection, neither them who have written before him; but rather give thanks unto God that he hath made manifest unto you our imperfections, that ye may learn to be more wise than we have been.

And now, behold, we have written this record according to our knowledge, in the characters which are called among us the reformed Egyptian, being handed down and altered by us, according to our manner of speech.

And if our plates had been sufficiently large we should have written in Hebrew; but the Hebrew hath been altered by us also; and if we could have written in Hebrew, behold, ye would have had no imperfection in our record.

But the Lord knoweth the things which we have written, and also that none other people knoweth our language; and because that none other people knoweth our language, therefore he hath prepared means for the interpretation thereof.

And these things are written that we may rid our garments of the blood of our brethren, who have dwindled in unbelief.

And behold, these things which we have desired concerning our brethren, yea, even their restoration to the knowledge of Christ, are according to the prayers of all the saints who have dwelt in the land.

And may the Lord Jesus Christ grant that their prayers may be answered according to their faith; and may God the Father remember the covenant which he hath made with the house of Israel; and may he bless them forever, through faith on the name of Jesus Christ. Amen.

ໜັງສືອີເທີ

ບັນທຶກຂອງຊາວຢາເຣັດທີ່ໄດ້ມາຈາກແຜ່ນຈາລຶກຊາວສີ່ແຜ່ນ ຊຶ່ງຜູ້ຄົນຂອງລິມໄຮໄດ້ພົບເຫັນໃນວັນເວລາຂອງກະສັດໂມໄຊ ຢາ.

ອີເທີ ๑

๑ ແລະ ບັດນີ້ຂ້າພະເຈົ້າ ໂມໂຣໄນໃຫ້ເລື່ອງລາວຂອງຜູ້ອາໄສຢູ່ໃນ ສະໄໝກ່ອນ ຊຶ່ງໄດ້ຖືກທຳລາຍໄປແລ້ວໃນຜືນແຜ່ນດິນທາງ ເໜືອນີ້ ໂດຍ ພຣະຫັດຂອງພຣະຜູ້ເປັນເຈົ້າ.

๘ ແລະ ຂ້າພະເຈົ້າຈະເຮັດບັນທຶກຂອງຂ້າພະເຈົ້າຈາກແຜ່ນ ຈາລຶກ ຊາວສີ່ແຜ່ນ ຊຶ່ງຜູ້ຄົນຂອງລິມໄຮໄດ້ພົບເຫັນ, ຊຶ່ງມີຊື່ວ່າ ໜັງສືອີເທີ.

๓ ແລະ ຄືກັນກັບທີ່ຂ້າພະເຈົ້າຄິດໄວ້ແລ້ວວ່າ, ໃນພາກທຳອິດ ຂອງບັນທຶກນີ້ ມີຢູ່ແລ້ວໃນບັນດາຊາວຢິວ ຊຶ່ງເວົ້າກ່ຽວກັບການ ສ້າງໂລກ ແລະ ກ່ຽວກັບອາດາມນຳອີກ ແລະ ເລື່ອງລາວນັບ ຕັ້ງແຕ່ເວລາຂອງອາດາມຈົນມາຮອດເວລາຂອງ ຫໍຄອຍສູງ ໃຫຍ່ນັ້ນ, ແລະ ເລື່ອງອັນໃດກໍຕາມຊຶ່ງເກີດຂຶ້ນໃນບັນດາລູກ ຫລານມະນຸດຈົນຮອດເວລານັ້ນ—

๔ ສະນັ້ນ ຂ້າພະເຈົ້າຈຶ່ງບໍ່ໄດ້ຂຽນເລື່ອງເຫລົ່ານັ້ນ ຊຶ່ງໄດ້ ເກີດຂຶ້ນນັບຕັ້ງແຕ່ ເວລາຂອງອາດາມຈົນມາຮອດເວລານັ້ນ; ເພາະມັນມີຢູ່ແລ້ວໃນແຜ່ນຈາລຶກ; ແລະ ຜູ້ໃດກໍຕາມທີ່ພົບພໍ້ ແຜ່ນຈາລຶກ, ຜູ້ນັ້ນຈະມີອຳນາດເພາະວ່າເຂົາຈະໄດ້ເລື່ອງລາວ ໂດຍຄົບຖ້ວນ.

๕ ແຕ່ຈົ່ງເບິ່ງ, ຂ້າພະເຈົ້າບໍ່ໄດ້ໃຫ້ເລື່ອງລາວໂດຍຄົບຖ້ວນ, ແຕ່ວ່າຂ້າພະເຈົ້າໄດ້ໃຫ້ໄວ້ພຽງສ່ວນໜຶ່ງຂອງເລື່ອງລາວນັບ ຕັ້ງແຕ່ຫໍຄອຍຈົນກະທັ່ງພວກເຂົາເຫລົ່ານັ້ນຖືກທຳລາຍໝົດ.

๖ ແລະ ຂ້າພະເຈົ້າໃຫ້ເລື່ອງລາວໄວ້ຕາມນີ້. ຜູ້ທີ່ຂຽນບັນທຶກນີ້ ມີຊື່ວ່າ ອີເທີ, ແລະ ລາວເປັນຜູ້ສືບຕະກຸນຂອງໂຄຣິອານທໍ.

๗ �โคริอานทำเป็นลูกชายของโมรัน.

๘ ແລະ �โมรันเป็นลูกชายของอีเทัม.

๙ ແລະ ອີເທັມເປັນລູກຊາຍຂອງເອຫາ.

๑๐ ແລະ ເອຫາເປັນລູກຊາຍຂອງເຊດ.

๑๑ ແລະ ເຊດເປັນລູກຊາຍຂອງຊິບລັນ.

๑๒ ແລະ ຊິບລັນເປັນລູກຊາຍຂອງຄອມ.

๑๓ ແລະ ຄອມເປັນລູກຊາຍຂອງໂຄຣິອານທຳ.

๑๔ ແລະ �โคริอานทำเป็นลูกชายของอามนิแกดา.

๑๕ ແລະ ອາມນິແກດາເປັນລູກຊາຍຂອງອາໂຣນ.

The Book of Ether

The record of the Jaredites, taken from the twenty-four plates found by the people of Limhi in the days of King Mosiah.

Ether 1

And now I, Moroni, proceed to give an account of those ancient inhabitants who were destroyed by the hand of the Lord upon the face of this north country.

And I take mine account from the twenty and four plates which were found by the people of Limhi, which is called the Book of Ether.

And as I suppose that the first part of this record, which speaks concerning the creation of the world, and also of Adam, and an account from that time even to the great tower, and whatsoever things transpired among the children of men until that time, is had among the Jews—

Therefore I do not write those things which transpired from the days of Adam until that time; but they are had upon the plates; and whoso findeth them, the same will have power that he may get the full account.

But behold, I give not the full account, but a part of the account I give, from the tower down until they were destroyed.

And on this wise do I give the account. He that wrote this record was Ether, and he was a descendant of Coriantor.

Coriantor was the son of Moron.

And Moron was the son of Ethem.

And Ethem was the son of Ahah.

And Ahah was the son of Seth.

And Seth was the son of Shiblon.

And Shiblon was the son of Com.

And Com was the son of Coriantum.

And Coriantum was the son of Amnigaddah.

And Amnigaddah was the son of Aaron.

ແລະ ອາໂຣນເປັນຜູ້ສືບຕະກຸນຂອງເຫັດ, ຜູ້ເປັນລູກຊາຍ ຂອງຮີອາທຳ.

And Aaron was a descendant of Heth, who was the son of Hearthom.

ແລະ ຮີອາທຳເປັນລູກຊາຍຂອງລິບ.

And Hearthom was the son of Lib.

ແລະ ລິບເປັນລູກຊາຍຂອງກີເຊ.

And Lib was the son of Kish.

ແລະ ກີເຊເປັນລູກຊາຍຂອງໂກຣຳ.

And Kish was the son of Corom.

ແລະ ໂກຣຳເປັນລູກຊາຍຂອງເລວີ.

And Corom was the son of Levi.

ແລະ ເລວີເປັນລູກຊາຍຂອງຄິມ.

And Levi was the son of Kim.

ແລະ ຄິມເປັນລູກຊາຍຂອງໂມຣິອານທັນ.

And Kim was the son of Morianton.

ແລະ ໂມຣິອານທັນເປັນຜູ້ສືບຕະກຸນຂອງຣິບລາຄິດ.

And Morianton was a descendant of Riplakish.

ແລະ ຣິບລາຄິດເປັນລູກຊາຍຂອງເຊັດ.

And Riplakish was the son of Shez.

ແລະ ເຊັດເປັນລູກຊາຍຂອງເຫັດ.

And Shez was the son of Heth.

ແລະ ເຫັດເປັນລູກຊາຍຂອງຄອມ.

And Heth was the son of Com.

ແລະ ຄອມເປັນລູກຊາຍຂອງໂຄຣິອານທຳ.

And Com was the son of Coriantum.

ແລະ ໂຄຣິອານທຳເປັນລູກຊາຍຂອງອີເມີ.

And Coriantum was the son of Emer.

ແລະ ອີເມີເປັນລູກຊາຍຂອງໂອເມ.

And Emer was the son of Omer.

ແລະ ໂອເມເປັນລູກຊາຍຂອງຊູນ.

And Omer was the son of Shule.

ແລະ ຊູນເປັນລູກຊາຍຂອງຄິບ.

And Shule was the son of Kib.

ແລະ ຄິບເປັນລູກຊາຍຂອງໂອໄຮຮາ, ຜູ້ເປັນລູກຊາຍຂອງ ຢາເຣັດ;

And Kib was the son of Orihah, who was the son of Jared;

ຢາເຣັດຜູ້ນີ້ແຫລະຄືຜູ້ທີ່ມາຈາກຫໍສູງໃຫຍ່ພ້ອມດ້ວຍ ນ້ອງຊາຍ ແລະ ຄອບຄົວຂອງພວກເຂົາ, ພ້ອມທັງຜູ້ອື່ນ ແລະ ຄອບຄົວຂອງພວກເຂົາ, ໃນວັນເວລາທີ່ພຣະຜູ້ເປັນເຈົ້າເຮັດໃຫ້ ພາສາຂອງມະນຸດ ສັບສົນກັນ, ແລະ ສາບານໃນພຣະພິໂລດ ຂອງພຣະອົງວ່າ ຜູ້ຄົນທັງຫລາຍຈະກະຈັດກະຈາຍໄປຕາມ ຜົນ ແຜ່ນດິນໂລກ; ແລະ ຕາມພຣະຄຳຂອງພຣະຜູ້ເປັນເຈົ້າມະນຸດ ຈຶ່ງກະຈັດກະຈາຍໄປ.

Which Jared came forth with his brother and their families, with some others and their families, from the great tower, at the time the Lord confounded the language of the people, and swore in his wrath that they should be scattered upon all the face of the earth; and according to the word of the Lord the people were scattered.

ແລະ ນ້ອງຊາຍຂອງຢາເຣັດ ໂດຍທີ່ເປັນຄົນຮ່າງໃຫຍ່ສູງ ແລະ ມີກຳລັງຫລາຍ, ແລະ ໂດຍທີ່ເປັນຜູ້ໂປດປານທີ່ສຸດຂອງ ພຣະຜູ້ເປັນເຈົ້າ, ຢາເຣັດ ຜູ້ເປັນອ້າຍຈຶ່ງເວົ້າກັບລາວວ່າ: ຈົ່ງ ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າເຖີດ, ເພື່ອພຣະອົງຈະບໍ່ເຮັດໃຫ້ ພາສາຂອງພວກເຮົາສັບສົນຈົນວ່າພວກເຮົາເວົ້າບໍ່ເຂົ້າໃຈກັນ.

And the brother of Jared being a large and mighty man, and a man highly favored of the Lord, Jared, his brother, said unto him: Cry unto the Lord, that he will not confound us that we may not understand our words.

ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງຊາຍຂອງຢາເຣັດໄດ້ ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ, ແລະ ພຣະຜູ້ເປັນເຈົ້າມີຄວາມ ເມດຕາສົງສານຕໍ່ຢາເຣັດ; ສະນັ້ນ ພຣະອົງຈຶ່ງບໍ່ໄດ້ເຮັດໃຫ້ ພາສາຂອງຢາເຣັດສັບສົນ; ແລະ ຢາເຣັດກັບນ້ອງຊາຍຂອງ ລາວກໍບໍ່ໄດ້ສັບສົນ.

And it came to pass that the brother of Jared did cry unto the Lord, and the Lord had compassion upon Jared; therefore he did not confound the language of Jared; and Jared and his brother were not confounded.

ມ້ດ ຈາກນັ້ນ ຢາເຮັດໄດ້ເວົ້າກັບນ້ອງຊາຍຂອງລາວວ່າ: ຈົ່ງຮ້ອງ ທູນຂໍພຣະຜູ້ເປັນເຈົ້າອີກ, ເພື່ອບາງທີພຣະອົງຈະຫັນເອົາ ພຣະພິ�โລດຂອງພຣະອົງໄປຈາກໝູ່ເພື່ອນຂອງພວກເຮົາ, ເພື່ອພຣະອົງຈະບໍ່ເຮັດໃຫ້ພາສາຂອງພວກເຂົາສັບສົນ.

ມ້ກ ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງຊາຍຂອງຢາເຮັດໄດ້ ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າ, ແລະ ພຣະອົງມີຄວາມເມດຕາປານີ ຕໍ່ໝູ່ເພື່ອນຂອງພວກເຂົາ, ພ້ອມທັງຄອບຄົວຂອງພວກເຂົານຳ ອີກ, ຄືພາສາຂອງພວກເຂົາບໍ່ໄດ້ສັບສົນ.

ມ້ຂ ແລະ ເຫດການໄດ້ບັງເກີດຂຶ້ນຄື ຢາເຮັດໄດ້ເວົ້າກັບນ້ອງຊາຍ ຂອງລາວອີກ, ມີຄວາມວ່າ: ຈົ່ງໄປທູນຖາມພຣະຜູ້ເປັນເຈົ້າວ່າ ພຣະອົງຈະຂັບໄລ່ພວກເຮົາອອກຈາກແຜ່ນດິນບໍ່ ແລະ ຖ້າ ຫາກພຣະອົງຈະຂັບໄລ່ພວກເຮົາອອກຈາກແຜ່ນດິນໄປ ຈົ່ງ ຮ້ອງທູນຕໍ່ພຣະອົງວ່າ ພວກເຮົາຈະໄປຫາບ່ອນໃດ? ແລະ ເພື່ອ ບາງທີພຣະຜູ້ເປັນເຈົ້າຈະໄດ້ນຳພາພວກເຮົາໄປຫາແຜ່ນດິນທີ່ ປະເສີດເລີດລ້ຳກວ່າແຜ່ນດິນອື່ນໃດໃນໂລກນີ້? ແລະ ຖ້າຫາກ ມັນເປັນເຊັ່ນນັ້ນກໍຂໍໃຫ້ພວກເຮົາຊື່ສັດຕໍ່ພຣະຜູ້ເປັນເຈົ້າ ເພື່ອ ຈະໄດ້ຮັບແຜ່ນດິນນັ້ນມາເປັນມູນມໍລະດົກຂອງພວກເຮົາ.

ມ້ຄ ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງຊາຍຂອງຢາເຮັດກໍໄດ້ ຮ້ອງທູນຕໍ່ພຣະຜູ້ເປັນເຈົ້າຕາມທີ່ໄດ້ເວົ້າໄວ້ດ້ວຍປາກຂອງ ຢາເຮັດ.

ຄ0 ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະຜູ້ເປັນເຈົ້າໄດ້ຍິນ ນ້ອງຊາຍຂອງຢາເຮັດ, ແລະ ມີຄວາມເມດຕາປານີຕໍ່ລາວ, ແລະ ໄດ້ກ່າວກັບລາວວ່າ:

ຄ1 ຈົ່ງໄປເຕົ້າໂຮມຝູງສັດລ້ຽງຂອງເຈົ້າທັງໂຕຜູ້ ແລະ ໂຕແມ່ ທຸກຊະນິດ, ແລະ ເມັດພືດເຄື່ອງປູກຂອງຝັງ ທຸກໆຊະນິດນຳ ອີກ; ພ້ອມທັງ ຄອບຄົວຂອງເຈົ້າ; ແລະ ຢາເຮັດອ້າຍຂອງເຈົ້າ ພ້ອມທັງຄອບຄົວຂອງລາວອີກ; ແລະ ໝູ່ເພື່ອນຂອງເຈົ້າພ້ອມ ທັງຄອບຄົວຂອງພວກເຂົາ; ແລະ ໝູ່ເພື່ອນຂອງຢາເຮັດພ້ອມ ທັງຄອບຄົວຂອງພວກເຂົາ.

ຄ2 ແລະ ເວລາເຈົ້າເຮັດຕາມນີ້ແລ້ວ ເຈົ້າຈົ່ງ ນຳໜ້າພວກເຂົາລົງ ໄປຫາຮ່ອມພູທາງເໜືອ. ແລະ ເຮົາຈະພົບກັບເຈົ້າຢູ່ບ່ອນນັ້ນ, ແລະ ເຮົາຈະ ນຳທາງເຈົ້າໄປຫາແຜ່ນດິນອັນ ປະເສີດເລີດລ້ຳ ກວ່າແຜ່ນດິນທັງໝົດໃນໂລກ.

ຄ3 ແລະ ບ່ອນນັ້ນເຮົາຈະໃຫ້ພອນແກ່ເຈົ້າ ແລະ ລູກຫລານຂອງ ເຈົ້າ, ແລະ ສະຖາປະນາປະຊາຊາດທີ່ຍິ່ງໃຫຍ່ນັ້ນໄວ້ໃຫ້ເຮົາຈາກ ລູກຫລານຂອງເຈົ້າ, ແລະ ຈາກລູກຫລານຂອງອ້າຍຂອງເຈົ້າ, ແລະ ຜູ້ທີ່ຈະໄປພ້ອມກັບເຈົ້າ, ແລະ ຈະບໍ່ມີປະຊາຊາດໃດໆໃນ ຜືນແຜ່ນດິນໂລກນີ້ທີ່ຈະຍິ່ງໃຫຍ່ກວ່າປະຊາຊາດ ຊຶ່ງເຮົາຈະ ສະຖາປະນາໃຫ້ຕົວເຮົາເອງ, ຈາກລູກຫລານຂອງເຈົ້າ. ແລະ ເຮົາຈະໃຫ້ເຈົ້າດັ່ງນີ້ຍ້ອນວ່າເຈົ້າໄດ້ຂໍເຮົາເປັນເວລາອັນຍາວນານ.

Then Jared said unto his brother: Cry again unto the Lord, and it may be that he will turn away his anger from them who are our friends, that he confound not their language.

And it came to pass that the brother of Jared did cry unto the Lord, and the Lord had compassion upon their friends and their families also, that they were not confounded.

And it came to pass that Jared spake again unto his brother, saying: Go and inquire of the Lord whether he will drive us out of the land, and if he will drive us out of the land, cry unto him whither we shall go. And who knoweth but the Lord will carry us forth into a land which is choice above all the earth? And if it so be, let us be faithful unto the Lord, that we may receive it for our inheritance.

And it came to pass that the brother of Jared did cry unto the Lord according to that which had been spoken by the mouth of Jared.

And it came to pass that the Lord did hear the brother of Jared, and had compassion upon him, and said unto him:

๑๖ ແລະ ຫລັງຈາກລາວໄດ້ອານາຈັກມາເປັນຂອງຕົນແລ້ວ ລາວ ໄດ້ເຮັດສິ່ງທີ່ຖືກຕ້ອງໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ; ແລະ ຜູ້ຄົນຈຶ່ງໄດ້ຮຸ່ງເຮືອງຂຶ້ນຢູ່ໃນແຜ່ນດິນ; ແລະ ລາວໄດ້ມີ ຊີວິດຢູ່ຢ່າງຍາວນານ, ແລະ ໄດ້ມີລູກຊາຍ ແລະ ລູກສາວຫລາຍ ຄົນ; ແລະ ລາວໄດ້ມີລູກຊາຍອີກຊື່ວ່າ ໂຄຣໍາ, ຊຶ່ງລາວໄດ້ແຕ່ງຕັ້ງ ໃຫ້ເປັນກະສັດແທນ.

And after he had obtained unto himself the kingdom he did that which was right in the sight of the Lord; and the people did prosper in the land; and he did live to a good old age, and begat sons and daughters; and he also begat Corom, whom he anointed king in his stead.

๑๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣໍາເຮັດແຕ່ສິ່ງທີ່ດີໃນ ສາຍພຣະເນດຂອງພຣະຜູ້ເປັນເຈົ້າຕະຫລອດວັນເວລາຂອງ ລາວ; ແລະ ລາວໄດ້ມີລູກຊາຍ ແລະ ລູກສາວຫລາຍຄົນ; ແລະ ຫລັງຈາກທີ່ລາວມີຊີວິດຢູ່ດົນນານແລ້ວ ລາວກໍໄດ້ຈາກໄປຄື ກັນກັບຄົນອື່ນໆຂອງແຜ່ນດິນໂລກ; ແລະ ກີເຊໄດ້ຂຶ້ນປົກຄອງ ແທນ.

And it came to pass that Corom did that which was good in the sight of the Lord all his days; and he begat many sons and daughters; and after he had seen many days he did pass away, even like unto the rest of the earth; and Kish reigned in his stead.

๑๘ ແລະ ເຫດການໄດ້ບັງເກີດຂຶ້ນຄື ກີເຊໄດ້ຈາກໄປອີກ, ແລະ ລິບໄດ້ຂຶ້ນປົກຄອງແທນ.

And it came to pass that Kish passed away also, and Lib reigned in his stead.

๑๙ ແລະ ເຫດການໄດ້ບັງເກີດຂຶ້ນຄື ລິບເຮັດສິ່ງທີ່ດີໃນສາຍພຣະ ເນດຂອງພຣະຜູ້ເປັນເຈົ້າຄືກັນ. ແລະ ໃນວັນເວລາຂອງລິບນັ້ນງູ ພິດຖືກທໍາລາຍຈົນໝົດສິ້ນ. ດັ່ງນັ້ນ ຜູ້ຄົນຈຶ່ງໄດ້ໄປຫາ ແຜ່ນດິນທາງໃຕ້ເພື່ອຊອກຫາອາຫານໃຫ້ຜູ້ຄົນຂອງແຜ່ນດິນ, ເພາະວ່າແຜ່ນດິນນັ້ນເຕັມໄປດ້ວຍສັດປ່າ. ແລະ ຕົວລິບເອງກໍ ກາຍເປັນນາຍພານໃຫຍ່ຜູ້ໜຶ່ງ.

And it came to pass that Lib also did that which was good in the sight of the Lord. And in the days of Lib the poisonous serpents were destroyed. Wherefore they did go into the land southward, to hunt food for the people of the land, for the land was covered with animals of the forest. And Lib also himself became a great hunter.

๘๐ ແລະ ພວກເຂົາໄດ້ສ້າງເມືອງໃຫຍ່ເມືອງໜຶ່ງຂຶ້ນໃກ້ກັບ ຊ່ອງແຄບຂອງແຜ່ນດິນໃກ້ກັບບ່ອນຊຶ່ງທະເລແບ່ງແຜ່ນດິນ ອອກ.

And they built a great city by the narrow neck of land, by the place where the sea divides the land.

๘๑ ແລະ ພວກເຂົາໄດ້ປົກປັກຮັກສາແຜ່ນດິນທາງໃຕ້ໄວ້ເປັນ ຖິ່ນແຫ້ງແລ້ງກັນດານ ເພື່ອຈະໄດ້ສັດໄວ້ລ່າ. ແລະ ສ່ວນ ແຜ່ນດິນທາງເໜືອນັ້ນ ເຕັມໄປດ້ວຍຜູ້ອາໄສຢູ່.

And they did preserve the land southward for a wilderness, to get game. And the whole face of the land northward was covered with inhabitants.

๘๒ ແລະ ພວກເຂົາມີການອຸດສາຫະກໍາຢ່າງຍິ່ງ, ແລະ ພວກເຂົາ ໄດ້ຊື້ຂາຍ ແລະ ທໍາການຄ້າລະຫວ່າງກັນ ເພື່ອຈະໄດ້ຜົນ ປະ�โຫຍດ.

And they were exceedingly industrious, and they did buy and sell and traffic one with another, that they might get gain.

๘๓ ແລະ ພວກເຂົາໄດ້ຂຸດຄົ້ນແຮ່ນາງຊະນິດ, ແລະ ໄດ້ ຫລໍ່ຫລອມຄໍາ, ແລະ ເງິນ, ແລະ ເຫລັກ, ແລະ ທອງເຫລືອງ, ແລະ ໂລຫະນາງຊະນິດ; ແລະ ພວກເຂົາໄດ້ຂຸດຄົ້ນມັນຂຶ້ນ ມາຈາກດິນ; ດັ່ງນັ້ນ, ພວກເຂົາຈຶ່ງໄດ້ຄູນດິນຂຶ້ນເປັນກອງໃຫຍ່ ເພື່ອໃຫ້ໄດ້ແຮ່ ເປັນຄໍາ, ແລະ ເປັນເງິນ, ແລະ ເປັນເຫລັກ, ແລະ ເປັນທອງແດງ. ແລະ ພວກເຂົາໄດ້ຜະລິດສິ່ງອື່ນໆອີກຫລາຍ ຢ່າງ.

And they did work in all manner of ore, and they did make gold, and silver, and iron, and brass, and all manner of metals; and they did dig it out of the earth; wherefore, they did cast up mighty heaps of earth to get ore, of gold, and of silver, and of iron, and of copper. And they did work all manner of fine work.

๘๔ ແລະ ພວກເຂົາໄດ້ຕ່ຳຜ້າໄໝ ແລະ ຜ້າລີນິນຕ່ຳຢ່າງດີ; ແລະ ພວກເຂົາໄດ້ເຮັດເສື້ອຜ້າຫລາຍຊະນິດ, ເພື່ອພວກເຂົາຈະໄດ້ຫຸ້ມຫໍ່ຄວາມເປືອຍເປົ່າຂອງພວກເຂົາ.

And they did have silks, and fine-twined linen; and they did work all manner of cloth, that they might clothe themselves from their nakedness.

๘๕ ແລະ ພວກເຂົາໄດ້ເຮັດເຄື່ອງມືນາໆຊະນິດເພື່ອໄຖດິນ, ທັງເພື່ອຂຸດ ແລະ ເພື່ອຫວ่ານ, ແລະ ເພື່ອເກັບກ່ຽວ ແລະ ເພື່ອພວນ, ແລະ ເພື່ອນວດນຳອີກ.

And they did make all manner of tools to till the earth, both to plow and to sow, to reap and to hoe, and also to thrash.

๘๖ ແລະ ພວກເຂົາໄດ້ເຮັດເຄື່ອງມືນາໆຊະນິດ ຊຶ່ງພວກເຂົາໄດ້ເຮັດໂດຍໃຊ້ແຮງງານຂອງສັດຂອງພວກເຂົາ.

And they did make all manner of tools with which they did work their beasts.

๘๗ ແລະ ພວກເຂົາໄດ້ສ້າງອາວຸດແຫ່ງສົງຄາມທຸກຊະນິດ. ແລະ ພວກເຂົາໄດ້ເຮັດວຽກນາໆຊະນິດດ້ວຍຝີມືແປກຢ່າງຍິ່ງ.

And they did make all manner of weapons of war. And they did work all manner of work of exceedingly curious workmanship.

๘๘ ແລະ ບໍ່ເຄີຍມີຜູ້ໃດເລີຍທີ່ໄດ້ຮັບພອນຫລາຍກວ່າພວກເຂົາ, ແລະ ມີຄວາມຈະເລີນຮຸ່ງເຮືອງໂດຍພຣະຫັດຂອງພຣະຜູ້ເປັນເຈົ້າຫລາຍກວ່ານີ້. ແລະ ພວກເຂົາໄດ້ຢູ່ໃນແຜ່ນດິນທີ່ປະເສີດເລີດລ້ຳກວ່າແຜ່ນດິນອື່ນໃດທັງສິ້ນ, ເພາະວ່າພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນັ້ນ.

And never could be a people more blessed than were they, and more prospered by the hand of the Lord. And they were in a land that was choice above all lands, for the Lord had spoken it.

๘๙ ແລະ ເຫດການໄດ້ບັງເກີດຂຶ້ນຄື ລິບມີຊີວິດຢູ່ຢ່າງຍາວນານ, ແລະ ໄດ້ມີລູກຊາຍ ແລະ ລູກສາວຫລາຍຄົນ; ແລະ ລາວກໍມີລູກຊາຍອີກຊື່ວ່າ ຮີອາທຳ.

And it came to pass that Lib did live many years, and begat sons and daughters; and he also begat Hearthom.

๙๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ຮີອາທຳໄດ້ປົກຄອງແທນບິດາຂອງລາວ. ແລະ ເມື່ອຮີອາທຳໄດ້ປົກຄອງຢູ່ຊາວສີ່ປີ, ຈົ່ງເບິ່ງ, ອານາຈັກຖືກຍຶດໄປຈາກລາວ. ແລະ ລາວໄດ້ຕົກເປັນຊະເລີຍຫລາຍປີ, ແທ້ຈິງແລ້ວ, ແມ່ນຕະຫລອດວັນເວລາທີ່ເຫລືອຢູ່ຂອງລາວ.

And it came to pass that Hearthom reigned in the stead of his father. And when Hearthom had reigned twenty and four years, behold, the kingdom was taken away from him. And he served many years in captivity, yea, even all the remainder of his days.

๙๑ ແລະ ລາວໄດ້ມີລູກຊາຍຊື່ວ່າ ເຫັດ, ແລະ ເຫັດໄດ້ໃຊ້ຊີວິດຢູ່ໃນຄວາມເປັນຊະເລີຍຕະຫລອດວັນເວລາຂອງລາວ. ແລະ ເຫັດມີລູກຊື່ວ່າ ອາໂຣນ, ແລະ ອາໂຣນໄດ້ຢູ່ໃນຄວາມເປັນຊະເລີຍຕະຫລອດວັນເວລາຂອງລາວຄືກັນ; ແລະ ລາວມີລູກຊາຍຊື່ວ່າ ອາມນິແກດາ, ແລະ ອາມນິແກດາກໍໄດ້ຢູ່ໃນຄວາມເປັນຊະເລີຍຕະຫລອດວັນເວລາຂອງລາວຄືກັນ; ແລະ ລາວມີລູກຊາຍຊື່ວ່າ ໂຄຣິອານທຳ, ແລະ ໂຄຣິອານທຳກໍໄດ້ຢູ່ໃນຄວາມເປັນຊະເລີຍຕະຫລອດວັນເວລາຂອງລາວຄືກັນ; ແລະ ລາວມີລູກຊາຍຊື່ວ່າ ຄອມ.

And he begat Heth, and Heth lived in captivity all his days. And Heth begat Aaron, and Aaron dwelt in captivity all his days; and he begat Amnigaddah, and Amnigaddah also dwelt in captivity all his days; and he begat Coriantum, and Coriantum dwelt in captivity all his days; and he begat Com.

๙๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ຄອມໄດ້ຍຶດເອົາອານາຈັກໄປເຄິ່ງໜຶ່ງ. ແລະ ລາວໄດ້ປົກຄອງອານາຈັກສ່ວນນັ້ນເປັນເວລາສີ່ສິບສອງປີ; ແລະ ລາວໄດ້ໄປສູ້ຮົບກັບກະສັດອາມກິດ, ແລະ ທັງສອງໄດ້ຕໍ່ສູ້ກັນເປັນເວລາຫລາຍປີ ຊຶ່ງລະຫว่າງເວລານັ້ນ ຄອມໄດ້ມີອຳນາດເໜືອອາມກິດ, ແລະ ໄດ້ຍຶດເອົາອານາຈັກສ່ວນທີ່ເຫລືອຢູ່ມາເປັນເຈົ້າຂອງ.

And it came to pass that Com drew away the half of the kingdom. And he reigned over the half of the kingdom forty and two years; and he went to battle against the king, Amgid, and they fought for the space of many years, during which time Com gained power over Amgid, and obtained power over the remainder of the kingdom.

ນ້ນ ແລະ ໃນວັນເວລາຂອງຄອມ ມັນເລີ່ມມີພວກໂຈນຢູ່ໃນ
ແຜ່ນດິນ; ແລະ ພວກເຂົາເຫລົ່ານັ້ນໄດ້ນຳເອົາແຜນເກົ່າມາໃຊ້,
ແລະ ໄດ້ເວົ້າ ຄຳສາບານຕາມວິທີຂອງຄົນສະໄໝບູຮານ, ແລະ
ພະຍາຍາມທີ່ຈະທຳລາຍອານາຈັກອີກ.

ນ້ນ ບັດນີ້ຄອມໄດ້ຕໍ່ສູ້ກັບພວກເຂົາຢ່າງໜັກ; ເຖິງຢ່າງໃດ
ກໍຕາມ, ລາວກໍຍັງເອົາຊະນະພວກເຂົາບໍ່ໄດ້.

And in the days of Com there began to be robbers in the land; and they adopted the old plans, and administered oaths after the manner of the ancients, and sought again to destroy the kingdom.

Now Com did fight against them much; nevertheless, he did not prevail against them.

ອີເທີ ๑๑

๑ ແລະ ໃນວັນເວລາຂອງຄອມ ໄດ້ມີສາດສະດາຫລາຍທ່ານອີກ, ແລະ ໄດ້ທຳນາຍເຖິງຄວາມພິນາດອັນໃຫຍ່ຫລວງຂອງຜູ້ຄົນ ຖ້າຫາກພວກເຂົາບໍ່ກັບใจ, ແລະ ຫັນໄປຫາພຣະຜູ້ເປັນເจົ້າ, ແລະ ປະຖິ້ມການຄາດຕະກຳ, ແລະ ຄວາມຊົ່ວຮ້ າຍຂອງພວກເຂົາ.

๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນບໍ່ຍອມຮັບຟັງຄຳຂອງສາດສະດາ, ແລະ ພວກເພີ່ນໄດ້ໜີໄປຫາຄອມເພື່ອຄວາມປອດໄພ, ເພາະວ່າຜູ້ຄົນພະຍາຍາມທີ່ຈະທຳລາຍພວກເພີ່ນ.

๓ ແລະ ພວກເພີ່ນໄດ້ທຳນາຍຫລາຍເລື່ອງແກ່ຄອມ; ແລະ ລາວໄດ້ຮັບພອນຕະຫລອດວັນເວລາທີ່ເຫລືອຢູ່ຂອງລາວ.

๔ ແລະ ລາວໄດ້ມີຊີວິດຢູ່ຢ່າງດົນນານ, ແລະ ໄດ້ມີລູກຊາຍຊື່ວ່າ ຊິບລຳ; ແລະ ຊິບລຳໄດ້ຂຶ້ນປົກຄອງແທນ. ແລະ ນ້ອງຊາຍຂອງ ຊິບລຳໄດ້ກະບົດຕໍ່ລາວ, ແລະ ເລີ່ມມີສົງຄາມໃຫຍ່ທີ່ສຸດທົ່ວ ແຜ່ນດິນ.

๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງຊາຍຂອງຊິບລຳໃຫ້ຂ້າ ສາດສະດາທັງໝົດຊຶ່ງໄດ້ທຳນາຍເຖິງຄວາມພິນາດຂອງຜູ້ຄົນ;

๖ ແລະ ມັນໄດ້ມີຄວາມສູນເສຍອັນໃຫຍ່ຫລວງທົ່ວແຜ່ນດິນ, ເພາະພວກເພີ່ນໄດ້ໃຫ້ຖ້ອຍຄຳວ່າ ຄຳສາບແຊ່ງອັນໃຫຍ່ຫລວງ ຈະມາສູ່ແຜ່ນດິນ, ແລະ ມາສູ່ຜູ້ຄົນນຳອີກ, ແລະ ວ່າມັນຈະມີ ຄວາມພິນາດອັນໃຫຍ່ຫລວງໃນບັນດາພວກເຂົາທີ່ບໍ່ເຄີຍມີມາ ກ່ອນໃນໜ້ານແຜ່ນດິນໂລກເລີຍ, ແລະ ວ່າກະດູກຂອງພວກເຂົາ ກະຈາຍ ກອງກັນຂຶ້ນເທິງແຜ່ນດິນ ຖ້າຫາກພວກເຂົາບໍ່ກັບใจ ຈາກຄວາມຊົ່ວຮ້ ານຂອງພວກເຂົາເສຍກ່ອນ.

๗ ແລະ ພວກເຂົາບໍ່ໄດ້ເຊື່ອຟັງສຸລະສຽງຂອງພຣະຜູ້ເປັນເจົ້າ ເລີຍ, ຍ້ອນວ່າການມົ້ວສຸມລັບອັນຊົ່ວຮ້ ານຂອງພວກເຂົາ; ດັ່ງນັ້ນ ມັນຈຶ່ງເລີ່ມມີສົງຄາມ ແລະ ມີການຂັດແຍ້ງກັນຂຶ້ນທົ່ວ ແຜ່ນດິນ, ແລະ ມັນມີຄວາມອຶດຢາກ ແລະ ພະຍາດໂລຄາຢ່າງ ຫລວງຫລາຍນຳອີກ ເຖິງຂະໜາດທີ່ມັນໄດ້ມີຄວາມພິນາດອັນ ໃຫຍ່ຫລວງຢ່າງທີ່ບໍ່ເຄີຍເຫັນມາກ່ອນໃນໜ້ານແຜ່ນດິນໂລກ; ແລະ ທັງໝົດນີ້ເກີດຂຶ້ນໃນວັນເວລາຂອງຊິບລຳ.

๘ ແລະ ຜູ້ຄົນເລີ່ມກັບใจຈາກຄວາມຊົ່ວຮ້ ານຂອງພວກເຂົາ; ແລະ ຕາບໃດທີ່ພວກເຂົາກັບใจ ພຣະຜູ້ເປັນເจົ້າຍັງມີ ເມດຕາຕໍ່ ພວກເຂົາຢູ່ສະເໝີ.

๙ ແລະ ເຫດການໄດ້ບັງເກີດຂຶ້ນຄື ຊິບລຳຖືກຂ້າ, ແລະ ເຊດຖືກ ຈັບໄປເປັນຊະເລີຍ, ແລະ ໄດ້ຢູ່ໃນຄວາມເປັນຊະເລີຍຕະຫລອດ ວັນເວລາຂອງລາວ.

Ether 11

And there came also in the days of Com many prophets, and prophesied of the destruction of that great people except they should repent, and turn unto the Lord, and forsake their murders and wickedness.

And it came to pass that the prophets were rejected by the people, and they fled unto Com for protection, for the people sought to destroy them.

And they prophesied unto Com many things; and he was blessed in all the remainder of his days.

And he lived to a good old age, and begat Shiblom; and Shiblom reigned in his stead. And the brother of Shiblom rebelled against him, and there began to be an exceedingly great war in all the land.

And it came to pass that the brother of Shiblom caused that all the prophets who prophesied of the destruction of the people should be put to death;

And there was great calamity in all the land, for they had testified that a great curse should come upon the land, and also upon the people, and that there should be a great destruction among them, such an one as never had been upon the face of the earth, and their bones should become as heaps of earth upon the face of the land except they should repent of their wickedness.

And they hearkened not unto the voice of the Lord, because of their wicked combinations; wherefore, there began to be wars and contentions in all the land, and also many famines and pestilences, insomuch that there was a great destruction, such an one as never had been known upon the face of the earth; and all this came to pass in the days of Shiblom.

And the people began to repent of their iniquity; and inasmuch as they did the Lord did have mercy on them.

And it came to pass that Shiblom was slain, and Seth was brought into captivity, and did dwell in captivity all his days.

๑๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ເອຫາ ລູກຊາຍຂອງລາວໄດ້ຮັບອານາຈັກມາປົກຄອງແທນ; ແລະ ລາວໄດ້ປົກຄອງຜູ້ຄົນຕະຫລອດວັນເວລາຂອງລາວ. ແລະ ລາວໄດ້ເຮັດຄວາມຊົ່ວຮ້າຍນາໆປະການໃນວັນເວລາຂອງລາວ, ຊຶ່ງດ້ວຍເຫດນີ້ ມັນຈຶ່ງໄດ້ເຮັດໃຫ້ເກີດການຂ້າຟັນກັນຢ່າງໜັກໃນເວລາອັນສັ້ນໆຂອງລາວ.

And it came to pass that Ahah, his son, did obtain the kingdom; and he did reign over the people all his days. And he did do all manner of iniquity in his days, by which he did cause the shedding of much blood; and few were his days.

๑๑ ແລະ ອີເທັມ, ໂດຍທີ່ເປັນຜູ້ສືບຕະກຸນຂອງເອຫາ, ຈຶ່ງໄດ້ຮັບອານາຈັກມາປົກຄອງ; ແລະ ລາວໄດ້ເຮັດສິ່ງທີ່ຊົ່ວຮ້າຍໃນວັນເວລາຂອງລາວຄືກັນ.

And Ethem, being a descendant of Ahah, did obtain the kingdom; and he also did do that which was wicked in his days.

๑๒ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນວັນເວລາຂອງອີເທັມ, ໄດ້ມີສາດສະດາຫລາຍທ່ານມາທຳນາຍແກ່ຜູ້ຄົນອີກ; ແທ້ຈິງແລ້ວ, ພວກເພິ່ນໄດ້ທຳນາຍວ່າ ພຣະຜູ້ເປັນເຈົ້າຈະທຳລາຍພວກເຂົາໃຫ້ໝົດສິ້ນໄປຈາກຜືນແຜ່ນດິນໂລກຖ້າຫາກພວກເຂົາບໍ່ກັບໃຈຈາກຄວາມຊົ່ວຮ້າຍຂອງພວກເຂົາເສຍກ່ອນ.

And it came to pass that in the days of Ethem there came many prophets, and prophesied again unto the people; yea, they did prophesy that the Lord would utterly destroy them from off the face of the earth except they repented of their iniquities.

๑๓ ແລະ ເຫດການໄດ້ບັງເກີດຂຶ້ນຄື ຜູ້ຄົນໄດ້ເຮັດໃຈແຂງກະດ້າງ, ແລະ ບໍ່ຍອມ ເຊື່ອຟັງຄຳຂອງພວກເພິ່ນເລີຍ; ແລະ ສາດສະດາໂສກເສົ້າ ແລະ ໄດ້ອອກໄປຈາກບັນດາຜູ້ຄົນ.

And it came to pass that the people hardened their hearts, and would not hearken unto their words; and the prophets mourned and withdrew from among the people.

๑๔ ແລະ ເຫດການໄດ້ບັງເກີດຂຶ້ນຄື ອີເທັມໄດ້ດຳເນີນການຕັດສິນດ້ວຍຄວາມຊົ່ວຮ້າຍຕະຫລອດວັນເວລາທັງໝົດຂອງລາວ; ແລະ ລາວໄດ້ມີລູກຊາຍຊື່ວ່າ ໂມຣັນ. ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມຣັນໄດ້ຂຶ້ນປົກຄອງແທນ ແລະ ໂມຣັນໄດ້ເຮັດສິ່ງທີ່ຊົ່ວຮ້າຍຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ.

And it came to pass that Ethem did execute judgment in wickedness all his days; and he begat Moron. And it came to pass that Moron did reign in his stead; and Moron did that which was wicked before the Lord.

๑๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ໄດ້ເກີດມີ ການກະບົດຂຶ້ນໃນບັນດາຜູ້ຄົນ, ຍ້ອນວ່າການມົ້ວສຸມລັບນັ້ນຊຶ່ງສ້າງຂຶ້ນເພື່ອຫາອຳນາດ ແລະ ຫາຜົນປະ�โຫຍດ; ແລະ ເກີດມີຜູ້ໜຶ່ງທີ່ຍິ່ງໃຫຍ່ໃນຄວາມຊົ່ວຮ້າຍໃນບັນດາພວກເຂົາ, ແລະ ໄດ້ສູ້ຮົບກັບໂມຣັນ, ຊຶ່ງດ້ວຍເຫດນີ້ລາວຈຶ່ງໄດ້ໂຄ່ນລົ້ມອານາຈັກໄປເຄິ່ງໜຶ່ງ; ແລະ ລາວໄດ້ປົກຄອງອານາຈັກເຄິ່ງນັ້ນເປັນເວລາຫລາຍປີ.

And it came to pass that there arose a rebellion among the people, because of that secret combination which was built up to get power and gain; and there arose a mighty man among them in iniquity, and gave battle unto Moron, in which he did overthrow the half of the kingdom; and he did maintain the half of the kingdom for many years.

๑๖ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂມຣັນໄດ້ໂຄ່ນລົ້ມຄືນ, ແລະ ໄດ້ຍຶດເອົາອານາຈັກຄືນມາອີກ.

And it came to pass that Moron did overthrow him, and did obtain the kingdom again.

๑๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ມີຄົນໜຶ່ງອີກທີ່ຍິ່ງໃຫຍ່; ແລະ ລາວເປັນຜູ້ສືບຕະກຸນຂອງນ້ອງຊາຍຂອງຢາເຣັດ.

And it came to pass that there arose another mighty man; and he was a descendant of the brother of Jared.

๑๘ ແລະ ເຫດການໄດ້ບັງເກີດຂຶ້ນຄື ລາວໄດ້ໂຄ່ນລົ້ມໂມຣັນ ແລະ ຍຶດເອົາອານາຈັກ; ດັ່ງນັ້ນ, �โມຣັນຈຶ່ງໄດ້ຢູ່ໃນຄວາມເປັນຊະເລີຍຕະຫລອດວັນເວລາທີ່ເຫລືອຢູ່ຂອງລາວ; ແລະ ລາວໄດ້ມີລູກຊາຍຊື່ວ່າ ໂຄຣິອານທໍ.

And it came to pass that he did overthrow Moron and obtain the kingdom; wherefore, Moron dwelt in captivity all the remainder of his days; and he begat Coriantor.

๑๙ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທໍໄດ້ຢູ່ໃນຄວາມເປັນຊະເລີຍຕະຫລອດວັນເວລາຂອງລາວ.

And it came to pass that Coriantor dwelt in captivity all his days.

๘๐ ແລະ ໃນວັນເວລາຂອງໂຄຣິອານທໍ ໄດ້ມີສາດສະດາຫລາຍ ທ່ານມາທຳນາຍເຖິງເລື່ອງທີ່ຍິ່ງໃຫຍ່ ແລະ ໜ້າອັດສະຈັນອີກ, ແລະ ໄດ້ປ່າວປະກາດການກັບໃຈຕໍ່ຜູ້ຄົນ, ແລະ ຖ້າຫາກພວກ ເຂົາບໍ່ກັບໃຈ ອົງພຣະຜູ້ເປັນເຈົ້າຈະດຳເນີນ ການພິພາກສາ ພວກເຂົາ ຈົນເຖິງຄວາມພິນາດທັງໝົດຂອງພວກເຂົາ;

And in the days of Coriantor there also came many prophets, and prophesied of great and marvelous things, and cried repentance unto the people, and except they should repent the Lord God would execute judgment against them to their utter destruction;

๘๑ ແລະວ່າອົງພຣະຜູ້ເປັນເຈົ້າຈະສົ່ງ ຫລື ນຳເອົາ ຄົນອື່ນ ມາເປັນເຈົ້າຂອງແຜ່ນດິນໂດຍອຳນາດຂອງພຣະອົງ, ຕາມວິທີ ທີ່ພຣະອົງນຳເອົາບັນພະບຸລຸດຂອງພວກເຂົາມານັ້ນ.

And that the Lord God would send or bring forth another people to possess the land, by his power, after the manner by which he brought their fathers.

๘๘ ແລະ ພວກເຂົາບໍ່ໄດ້ຍອມຮັບຄຳທັງໝົດຂອງສາດສະດາ ເລີຍ, ຍ້ອນວ່າສັງຄົມລັບ ແລະ ຄວາມໜ້າກຽດຊັງອັນຊົ່ວຮ້າຍ ຂອງພວກເຂົາ.

And they did reject all the words of the prophets, because of their secret society and wicked abominations.

๘๙ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທໍໄດ້ມີລູກຊາຍຊື່ ວ່າ ອີເທີ, ແລະ ລາວໄດ້ສິ້ນຊີວິດໄປ, ໂດຍຢູ່ໃນຄວາມເປັນຊະເລີຍ ຕະຫລອດວັນເວລາຂອງລາວ.

And it came to pass that Coriantor begat Ether, and he died, having dwelt in captivity all his days.

ອີເທີ ๑๘

๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ອີເທີມີຊີວິດຢູ່ໃນວັນເວລາຂອງ ໂຄຣິອານທະເມີ; ແລະ �โคริอานทะเมีเป็นกะสัตปีกถองทั่ว ແຜ່ນດິນ.

๘ ແລະ ອີເທີເປັນສາດສະດາຂອງພຣະຜູ້ເປັນເຈົ້າ; ດັ່ງນັ້ນ ອີເທີ ຈຶ່ງໄດ້ອອກມາໃນວັນເວລາຂອງໂຄຣິອານທະເມີ, ແລະ ໄດ້ເລີ່ມ ທຳນາຍແກ່ຜູ້ຄົນ, ເພາະວ່າຈະ ຫ້າມເພີ່ນບໍ່ໄດ້ຍ້ອນ ພຣະວິນຍານຂອງພຣະຜູ້ເປັນເຈົ້າ ຊຶ່ງສະຖິດຢູ່ກັບເພີ່ນ.

๙ ເພາະວ່າເພີ່ນໄດ້ ປ່າວປະກາດຕັ້ງແຕ່ຕອນເຊົ້າຈົນຮອດ ຕາເວັນຕົກດິນ, ແລະ ຊັກຊວນຜູ້ຄົນໃຫ້ເຊື່ອໃນພຣະເຈົ້າເພື່ອ ຈະນຳໄປສູ່ການກັບໃຈ ຖ້າບໍ່ດັ່ງນັ້ນ ພວກເຂົາຈະຖືກ ທຳລາຍ, ໂດຍກ່າວກັບພວກເຂົາວ່າ ດ້ວຍ ສັດທາ ທຸກສິ່ງທຸກຢ່າງຍ່ອມ ສຳເລັດ—

๑๐ ດັ່ງນັ້ນ, ຜູ້ໃດທີ່ເຊື່ອໃນພຣະເຈົ້າ ຜູ້ນັ້ນອາດຈະ ມຸ້ງຫວັງຢ່າງ ແນ່ນອນສຳລັບໂລກທີ່ຈະດີກວ່ານີ້, ແທ້ຈິງແລ້ວ, ແມ່ນທາງ ເບື້ອງຂວາພຣະຫັດຂອງພຣະເຈົ້າ, ຊຶ່ງຄວາມຫວັງນີ້ມາຈາກ ສັດທາອັນເຮັດ ຫລັກໝັ້ນໃຫ້ແກ່ຈິດວິນຍານຂອງມະນຸດ, ຊຶ່ງ ຈະເຮັດໃຫ້ເຂົາແນ່ໃຈ ແລະ ແນ່ວແນ່, ເຮັດວຽກງານດີໃຫ້ຫລາຍ ຢູ່ສະເໝີ, ອັນຈະນຳໄປຫາ ການຖວາຍບາລະມີແດ່ພຣະເຈົ້າ.

๑๑ ແລະ ເຫດການໄດ້ບັງເກີດຂຶ້ນຄື ອີເທີໄດ້ທຳນາຍເລື່ອງທີ່ຍິ່ງ ໃຫຍ່ ແລະ ໜ້າອັດສະຈັນແກ່ຜູ້ຄົນ, ຊຶ່ງພວກເຂົາບໍ່ເຊື່ອຍ້ອນ ວ່າພວກເຂົາບໍ່ເຫັນມັນ.

๑๒ ແລະ ບັດນີ້ຂ້າພະເຈົ້າໂມໂຣໄນຈະເວົ້າບາງຢ່າງກ່ຽວກັບສິ່ງ ເຫລົ່ານີ້; ຂ້າພະເຈົ້າຈະສະແດງຕໍ່ໂລກວ່າ ສັດທາຄືສິ່ງທີ່ ມຸ້ງ ຫວັງໄວ້ ແລະ ຍັງ ບໍ່ທັນເຫັນ; ດັ່ງນັ້ນ ຈົ່ງຢ່າໄດ້ໂຕ້ຖຽງກັນ ເລີຍ, ເພາະທ່ານບໍ່ເຫັນຍ້ອນວ່າທ່ານຈະບໍ່ໄດ້ຮັບພະຍານຈົນ ກວ່າຫລັງຈາກ ການທົດລອງສັດທາຂອງທ່ານ.

๑๓ ເພາະເປັນດ້ວຍສັດທາທີ່ພຣະຄຣິດໄດ້ມາປະກົດຕົວແກ່ ບັນພະບຸລຸດຂອງພວກເຮົາ, ຫລັງຈາກພຣະອົງໄດ້ຟື້ນຄືນ ພຣະຊົນແລ້ວ; ແລະ ພຣະອົງຈະບໍ່ປະກົດຕົວແກ່ພວກເຂົາ ຈົນ ກວ່າຫລັງຈາກພວກເຂົາມີສັດທາໃນພຣະອົງແລ້ວ; ດັ່ງນັ້ນ, ມັນຈຶ່ງຕ້ອງເປັນໄປວ່າ ບາງຄົນມີສັດທາໃນພຣະອົງ, ເພາະວ່າ ພຣະອົງບໍ່ໄດ້ປະກົດຕົວແກ່ໂລກ.

๑๔ ແຕ່ເປັນຍ້ອນສັດທາຂອງມະນຸດ ພຣະອົງຈຶ່ງຈະມາປະກົດ ຕົວແກ່ໂລກ, ແລະ ຖວາຍບາລະມີພຣະນາມ ຂອງພຣະບິດາ, ແລະ ຕຽມທາງໄວ້ເພື່ອໂດຍທາງນັ້ນ ຜູ້ອື່ນຈະໄດ້ມີສ່ວນໃນ ຂອງປະທານຈາກສະຫວັນ, ເພື່ອເຂົາຈະໄດ້ຫວັງໃນສິ່ງເຫລົ່າ ນັ້ນ ຊຶ່ງພວກເຂົາຍັງບໍ່ທັນເຫັນເທື່ອ.

๑๕ ດັ່ງນັ້ນ, ທ່ານຈະມີຄວາມຫວັງອີກ, ແລະ ເປັນຜູ້ມີສ່ວນໃນ ຂອງປະທານນັ້ນ, ຖ້າພຽງແຕ່ທ່ານມີສັດທາ.

Ether 12

And it came to pass that the days of Ether were in the days of Coriantumr; and Coriantumr was king over all the land.

And Ether was a prophet of the Lord; wherefore Ether came forth in the days of Coriantumr, and began to prophesy unto the people, for he could not be restrained because of the Spirit of the Lord which was in him.

For he did cry from the morning, even until the going down of the sun, exhorting the people to believe in God unto repentance lest they should be destroyed, saying unto them that by faith all things are fulfilled—

Wherefore, whoso believeth in God might with surety hope for a better world, yea, even a place at the right hand of God, which hope cometh of faith, maketh an anchor to the souls of men, which would make them sure and steadfast, always abounding in good works, being led to glorify God.

And it came to pass that Ether did prophesy great and marvelous things unto the people, which they did not believe, because they saw them not.

And now, I, Moroni, would speak somewhat concerning these things; I would show unto the world that faith is things which are hoped for and not seen; wherefore, dispute not because ye see not, for ye receive no witness until after the trial of your faith.

For it was by faith that Christ showed himself unto our fathers, after he had risen from the dead; and he showed not himself unto them until after they had faith in him; wherefore, it must needs be that some had faith in him, for he showed himself not unto the world.

But because of the faith of men he has shown himself unto the world, and glorified the name of the Father, and prepared a way that thereby others might be partakers of the heavenly gift, that they might hope for those things which they have not seen.

Wherefore, ye may also have hope, and be partakers of the gift, if ye will but have faith.

๑๐	ຈົ່ງເບິ່ງ ເປັນດ້ວຍສັດທາຄົນໃນສະໄໝກ່ອນ ຈົ່ງຖືກ ເອີ້ນ ຕາມລະບຽບອັນສັກສິດຂອງພຣະເຈົ້າ.	Behold it was by faith that they of old were called after the holy order of God.
๑๑	ດັ່ງນັ້ນ, ດ້ວຍສັດທາ ພຣະອົງຈົ່ງປະທານກົດຂອງໂມເຊໃຫ້. ແຕ່ດ້ວຍຂອງປະທານຂອງພຣະບຸດຂອງພຣະອົງ ພຣະເຈົ້າຈົ່ງ ໄດ້ຕຽມເສັ້ນທາງ ອັນປະເສີດທີ່ສຸດໃຫ້; ແລະ ເປັນດ້ວຍສັດທາ ມັນຈົ່ງສຳເລັດ.	Wherefore, by faith was the law of Moses given. But in the gift of his Son hath God prepared a more excellent way; and it is by faith that it hath been fulfilled.
๑๒	ເພາະຖ້າຫາກບໍ່ມີ ສັດທາໃນບັນດາລູກຫລານມະນຸດ ພຣະເຈົ້າຈະເຮັດ ສິ່ງມະຫັດສະຈັນໃນບັນດາພວກເຂົາບໍ່ໄດ້; ດັ່ງນັ້ນ ພຣະອົງຈົ່ງບໍ່ປະກົດຕົວຈົນກວ່າຫລັງຈາກທີ່ພວກເຂົາ ມີສັດທາ.	For if there be no faith among the children of men God can do no miracle among them; wherefore, he showed not himself until after their faith.
๑๓	ຈົ່ງເບິ່ງ, ມັນແມ່ນສັດທາຂອງແອວມາ ແລະ ແອມມິວເລັກທີ່ ເຮັດໃຫ້ ຄຸກພັງທະລາຍລົງພື້ນດິນ.	Behold, it was the faith of Alma and Amulek that caused the prison to tumble to the earth.
๑๔	ຈົ່ງເບິ່ງ, ມັນແມ່ນສັດທາຂອງນີໄຟ ແລະ ລີໄຮທີ່ເຮັດໃຫ້ເກີດ ການ ປ່ຽນແປງກັບຊາວເລມັນ, ຈົນວ່າພວກເຂົາໄດ້ຮັບ ບັບຕິສະມາດ້ວຍໄຟ ແລະ ດ້ວຍ ພຣະວິນຍານບໍລິສຸດ.	Behold, it was the faith of Nephi and Lehi that wrought the change upon the Lamanites, that they were baptized with fire and with the Holy Ghost.
๑๕	ຈົ່ງເບິ່ງ, ມັນແມ່ນສັດທາຂອງ ອຳໂມນ ແລະ ພີ່ນ້ອງຂອງ ລາວ ຊຶ່ງໄດ້ ເຮັດສິ່ງມະຫັດສະຈັນອັນຍິ່ງໃຫຍ່ເຊັ່ນນີ້ໃນບັນດາ ຊາວເລມັນ.	Behold, it was the faith of Ammon and his brethren which wrought so great a miracle among the Lamanites.
๑๖	ແທ້ຈິງແລ້ວ, ແລະ ຄົນທັງປວງທີ່ເຮັດ ສິ່ງມະຫັດສະຈັນກໍ ເຮັດດ້ວຍ ສັດທາ, ເຖິງແມ່ນຜູ້ທີ່ເປັນຢູ່ມາກ່ອນພຣະຄຣິດ ແລະ ຜູ້ທີ່ເປັນຢູ່ພາຍຫລັງພຣະຄຣິດກໍຄືກັນ.	Yea, and even all they who wrought miracles wrought them by faith, even those who were before Christ and also those who were after.
๑๗	ແລະ ມັນເປັນຍ້ອນສັດທາທີ່ສານຸສິດສາມຄົນໄດ້ຮັບສັນຍາ ວ່າ ພວກເພີ່ນ ບໍ່ຈຳເປັນຕ້ອງຊີມລົດຊາດຂອງຄວາມຕາຍເລີຍ; ແລະ ພວກເພີ່ນບໍ່ໄດ້ຮັບສັນຍານີ້ຈົນກວ່າຫລັງຈາກພວກເພີ່ນ ມີສັດທາ.	And it was by faith that the three disciples obtained a promise that they should not taste of death; and they obtained not the promise until after their faith.
๑๘	ແລະ ທັງບໍ່ວ່າເວລາໃດກໍຕາມ ຈະບໍ່ມີຜູ້ໃດສາມາດເຮັດສິ່ງ ມະຫັດສະຈັນໄດ້ເລີຍຈົນກວ່າຜູ້ນັ້ນຈະມີສັດທາເສຍກ່ອນ; ດັ່ງນັ້ນ ກ່ອນອື່ນໝົດເຂົາຕ້ອງເຊື່ອໃນພຣະບຸດຂອງພຣະເຈົ້າ ເສຍກ່ອນ.	And neither at any time hath any wrought miracles until after their faith; wherefore they first believed in the Son of God.
๑๙	ແລະ ມີຫລາຍຄົນທີ່ມີສັດທາອັນແຮງກ້າ, ແມ່ນແຕ່ ກ່ອນ ພຣະຄຣິດສະເດັດມາ, ຜູ້ບໍ່ສາມາດຖືກກີດກັນຈາກພາຍໃນ ມ່ານ, ແຕ່ໄດ້ເຫັນດ້ວຍຕາຂອງຕົນເອງ ຊຶ່ງສິ່ງເຫລົ່ານັ້ນ ພວກ ເຂົາໄດ້ເຫັນແລ້ວດ້ວຍຕາແຫ່ງສັດທາ, ແລະ ພວກເຂົາກໍພໍໃຈ.	And there were many whose faith was so exceedingly strong, even before Christ came, who could not be kept from within the veil, but truly saw with their eyes the things which they had beheld with an eye of faith, and they were glad.
๘๐	ແລະ ຈົ່ງເບິ່ງ, ພວກເຮົາເຫັນໃນບັນທຶກນີ້ວ່າ ຄົນຜູ້ໜຶ່ງໃນ ຈຳນວນຄົນເຫລົ່ານີ້ຄືນ້ອງຊາຍຂອງຢາເຮັດ; ຍ້ອນວ່າລາວມີ ສັດທາອັນຍິ່ງໃຫຍ່ທີ່ສຸດໃນພຣະເຈົ້າ, ເວລາພຣະເຈົ້າເດ່ ນິ້ວ ພຣະຫັດອອກມາ ພຣະອົງຈົ່ງບໍ່ສາມາດເຊື່ອງມັນໄວ້ໃຫ້ພົ້ນ ຈາກສາຍຕາຂອງນ້ອງຊາຍຂອງຢາເຮັດໄດ້, ເພາະດ້ວຍພຣະຄຳ ຂອງພຣະອົງທີ່ຮັບສັ່ງກັບລາວ ຊຶ່ງຄຳນັ້ນລາວໄດ້ຮັບມາໂດຍ ສັດທາ.	And behold, we have seen in this record that one of these was the brother of Jared; for so great was his faith in God, that when God put forth his finger he could not hide it from the sight of the brother of Jared, because of his word which he had spoken unto him, which word he had obtained by faith.

๔๑ ແລະ ຫລັງຈາກນ້ອງຊາຍຂອງຢາເຣັດເຫັນນິ້ວພຣະຫັດ ຂອງພຣະຜູ້ເປັນເจ້ົາແລ້ວ, ເປັນເພາະ ສັນຍາທີ່ນ້ອງຊາຍຂອງ ຢາເຣັດໄດ້ຮັບມາໂດຍສັດທາ, ພຣະຜູ້ເປັນເจ້ົາຈຶ່ງບໍ່ສາມາດບັງ ສິ່ງໃດໃຫ້ພົ້ນຈາກສາຍຕາຂອງລາວໄດ້; ດັ່ງນັ້ນ ພຣະອົງຈຶ່ງ ສະແດງທຸກສິ່ງທຸກຢ່າງແກ່ລາວ, ເພາະພຣະອົງບໍ່ສາມາດ ກີດກັນລາວໃຫ້ຢູ່ນອກ ມ່ານອີກຕໍ່ໄປ.

And after the brother of Jared had beheld the finger of the Lord, because of the promise which the brother of Jared had obtained by faith, the Lord could not withhold anything from his sight; wherefore he showed him all things, for he could no longer be kept without the veil.

๔๒ ແລະ ເປັນດ້ວຍສັດທາທີ່ບັນພະບຸລຸດຂອງຂ້າພະເจ້ົາໄດ້ຮັບ ສັນຍາວ່າ ສິ່ງເຫລົ່ານີ້ຈະມາຫາພີ່ນ້ອງຂອງພວກເຂົາໂດຍຜ່ານ ຄົນຕ່າງຊາດ; ສະນັ້ນ ພຣະຜູ້ເປັນເจ້ົາຈຶ່ງບັນຊາຂ້າພະເจ້ົາ; ແທ້ ຈິງແລ້ວ, ຄືພຣະເຢຊູຄຣິດ.

And it is by faith that my fathers have obtained the promise that these things should come unto their brethren through the Gentiles; therefore the Lord hath commanded me, yea, even Jesus Christ.

๔๓ ແລະ ຂ້າພະເจ້ົາທູນຕໍ່ພຣະອົງວ່າ: ພຣະອົງເจ້ົາເອີຍ, ຄົນ ຕ່າງຊາດຈະເຍາະເຍີ້ຍສິ່ງເຫລົ່ານີ້, ເພາະ ຄວາມອ່ອນແອຂອງ ການຂຽນຂອງພວກຂ້ານ້ອຍ; ເພາະພຣະອົງເจ້ົາເອີຍ ພຣະອົງ ໄດ້ເຮັດໃຫ້ພວກຂ້ານ້ອຍ ຍິ່ງໃຫຍ່ໃນຄຳເວົ້າໂດຍສັດທາ, ແຕ່ ພຣະອົງບໍ່ໄດ້ເຮັດໃຫ້ພວກຂ້ານ້ອຍຍິ່ງໃຫຍ່ໃນການຂຽນ; ເພາະພຣະອົງເຮັດໃຫ້ຜູ້ຄົນພວກນີ້ເວົ້າໄດ້ຫລາຍເພາະ ພຣະວິນຍານບໍລິສຸດຊຶ່ງພຣະອົງໄດ້ປະທານໃຫ້ແກ່ພວກເຂົາ;

And I said unto him: Lord, the Gentiles will mock at these things, because of our weakness in writing; for Lord thou hast made us mighty in word by faith, but thou hast not made us mighty in writing; for thou hast made all this people that they could speak much, because of the Holy Ghost which thou hast given them;

๔๔ ແລະ ພຣະອົງໄດ້ເຮັດໃຫ້ພວກຂ້ານ້ອຍຂຽນໄດ້ພຽງໜ້ອຍ ດຽວ, ເພາະຄວາມບໍ່ຊຳນິຊຳນານຂອງມືຂອງພວກຂ້ານ້ອຍ. ຈົ່ງ ເບິ່ງ, ພຣະອົງບໍ່ໄດ້ເຮັດໃຫ້ພວກຂ້ານ້ອຍຍິ່ງໃຫຍ່ໃນ ການຂຽນ ຄືກັນກັບນ້ອງຊາຍຂອງຢາເຣັດ, ເພາະພຣະອົງເຮັດໃຫ້ເລື່ອງ ຊຶ່ງລາວຂຽນໄວ້ນັ້ນຍິ່ງໃຫຍ່ຄືກັນກັບພຣະອົງ, ຈົນວ່າເກີນ ກຳລັງຂອງມະນຸດທີ່ຈະອ່ານມັນໄດ້.

And thou hast made us that we could write but little, because of the awkwardness of our hands. Behold, thou hast not made us mighty in writing like unto the brother of Jared, for thou madest him that the things which he wrote were mighty even as thou art, unto the overpowering of man to read them.

๔๕ ພຣະອົງເຮັດໃຫ້ຄຳເວົ້າຂອງພວກຂ້ານ້ອຍມີອຳນາດ ແລະ ຍິ່ງໃຫຍ່ນຳອີກ, ຈົນວ່າພວກຂ້ານ້ອຍຂຽນໄວ້ບໍ່ໄດ້; ດັ່ງນັ້ນ, ເວລາພວກຂ້ານ້ອຍຂຽນ ພວກຂ້ານ້ອຍຈຶ່ງເຫັນຄວາມອ່ອນແອ ຂອງຕົນ, ແລະ ສະດຸດຍ້ອນວ່າການວາງຄຳເວົ້າຂອງພວກຂ້າ ນ້ອຍ; ແລະ ຂ້ານ້ອຍຢ້ານວ່າຄົນຕ່າງຊາດຈະ ເຍາະເຍີ້ຍຄຳເວົ້າ ຂອງພວກຂ້ານ້ອຍ.

Thou hast also made our words powerful and great, even that we cannot write them; wherefore, when we write we behold our weakness, and stumble because of the placing of our words; and I fear lest the Gentiles shall mock at our words.

๔๖ ແລະ ເວລາຂ້າພະເจ້ົາເວົ້າຂໍ້ຄວາມນີ້ແລ້ວ, ພຣະຜູ້ເປັນເจ້	d ໄດ້ ກ່າວກັບຂ້າພະເจ້ົາວ່າ: ຄົນໂງ່ຈະ ເຍາະເຍີ້ຍ, ແຕ່ວ່າເຂົາຈະ ເປັນທຸກ; ແລະ ຄຸນງາມຄວາມດີຂອງເຮົາມີພຽງພໍສຳລັບຄົນທີ່ ອ່ອນໂยน, ເພື່ອເຂົາຈະບໍ່ເອົາປຽບຄວາມອ່ອນແອຂອງເจ້	d.

And when I had said this, the Lord spake unto me, saying: Fools mock, but they shall mourn; and my grace is sufficient for the meek, that they shall take no advantage of your weakness;

๔๗ ແລະ ຖ້າຫາກມະນຸດມາຫາເຮົາ, ເຮົາຈະສະແດງໃຫ້ເຂົາເຫັນ ຄວາມອ່ອນແອຂອງເຂົາ. ເຮົາຈະ ມອບຄວາມອ່ອນແອໃຫ້ ມະນຸດ ເພື່ອເຂົາຈະໄດ້ຖ່ອມຕົວ; ແລະ ພຣະຄຸນຂອງເຮົາມີ ພຽງພໍສຳລັບຄົນທັງປວງທີ່ ຖ່ອມຕົວຕໍ່ໜ້າເຮົາ; ເພາະຖ້າ ຫາກເຂົາຖ່ອມຕົວຕໍ່ໜ້າເຮົາ, ແລະ ມີສັດທາໃນເຮົາ, ເວລານັ້ນ ເຮົາຈະເຮັດໃຫ້ສິ່ງທີ່ ອ່ອນແອນັ້ນກັບມາເຂັ້ມແຂງສຳລັບເຂົາ.

And if men come unto me I will show unto them their weakness. I give unto men weakness that they may be humble; and my grace is sufficient for all men that humble themselves before me; for if they humble themselves before me, and have faith in me, then will I make weak things become strong unto them.

๘๒ ຈົ່ງເບິ່ງ, ເຮົາຈະສະແດງໃຫ້ຄົນຕ່າງຊາດເຫັນຄວາມອ່ອນແອ ຂອງເຂົາ, ແລະ ເຮົາຈະສະແດງໃຫ້ເຂົາເຫັນວ່າ ສັດທາ, ຄວາມ ຫວັງ, ແລະ ຄວາມໃຈບຸນຈະນຳພວກເຂົາມາຫາເຮົາ—ຊຶ່ງເປັນ ອ່າງນ້ຳແຫ່ງຄວາມຊອບທຳທັງປວງ.

Behold, I will show unto the Gentiles their weakness, and I will show unto them that faith, hope and charity bringeth unto me—the fountain of all righteousness.

๘๓ ແລະ ຂ້າພະເຈົ້າໂມໂຣໄນເວລາໄດ້ຍິນຂໍ້ຄວາມເຫລົ່ານີ້ແລ້ວ, ກໍສະບາຍໃຈຂຶ້ນ, ແລະ ທູນວ່າ: ໂອ້ ພຣະຜູ້ເປັນເຈົ້າ, ພຣະປະສົງອັນຊອບທຳຂອງພຣະອົງຈະສຳເລັດ, ເພາະວ່າຂ້າ ນ້ອຍຮູ້ວ່າ ພຣະອົງເຮັດວຽກງານໃຫ້ລູກຫລານມະນຸດຕາມ ສັດທາຂອງເຂົາ;

And I, Moroni, having heard these words, was comforted, and said: O Lord, thy righteous will be done, for I know that thou workest unto the children of men according to their faith;

๘๔ ເພາະນ້ອງຊາຍຂອງຢາເຣັດເວົ້າກັບພູຊີຣິນວ່າ, ຈົ່ງ ຍ້າຍໄປ —ແລະ ມັນກໍໄດ້ຍ້າຍໄປ. ແລະ ຖ້າຫາກລາວບໍ່ມີສັດທາ ມັນກໍ ຈະບໍ່ຍ້າຍໄປ; ດັ່ງນັ້ນ ພຣະອົງຈຶ່ງເຮັດວຽກງານຫລັງຈາກທີ່ ມະນຸດມີສັດທາ.

For the brother of Jared said unto the mountain Zerin, Remove—and it was removed. And if he had not had faith it would not have moved; wherefore thou workest after men have faith.

๘๕ ເພາະວ່າພຣະອົງໄດ້ສະແດງພຣະອົງເອງໃຫ້ປະຈັກແກ່ສານຸ ສິດຂອງພຣະອົງຕາມນັ້ນ; ເພາະຫລັງຈາກທີ່ພວກເຂົາມີ ສັດທາ ແລະ ໄດ້ເວົ້າໃນພຣະນາມຂອງພຣະອົງ, ພຣະອົງຈຶ່ງໄດ້ ປະກົດຕົວຕໍ່ພວກເຂົາດ້ວຍອຳນາດອັນຍິ່ງໃຫຍ່.

For thus didst thou manifest thyself unto thy disciples; for after they had faith, and did speak in thy name, thou didst show thyself unto them in great power.

๘๖ ແລະ ຂ້ານ້ອຍຈື່ໄດ້ອີກວ່າ ພຣະອົງກ່າວວ່າ ພຣະອົງໄດ້ຕຽມ ທີ່ພັກໄວ້ໃຫ້ແກ່ມະນຸດ, ແທ້ຈິງແລ້ວ, ແມ່ນໃນທ່າມກາງ ຜາ ສາດຂອງພຣະບິດາຂອງພຣະອົງ, ຊຶ່ງໃນນັ້ນ ມະນຸດຈະໄດ້ມີ ຄວາມຫວັງອັນປະເສີດທີ່ສຸດ; ດັ່ງນັ້ນ ມະນຸດຈຶ່ງຕ້ອງມີຄວາມ ຫວັງ, ຖ້າບໍ່ດັ່ງນັ້ນ ເຂົາຈະຮັບມູນມໍລະດົກໃນບ່ອນທີ່ພຣະອົງ ຕຽມໄວ້ບໍ່ໄດ້.

And I also remember that thou hast said that thou hast prepared a house for man, yea, even among the mansions of thy Father, in which man might have a more excellent hope; wherefore man must hope, or he cannot receive an inheritance in the place which thou hast prepared.

๘๗ ແລະ ອີກເທື່ອໜຶ່ງ, ຂ້ານ້ອຍຈື່ໄດ້ອີກວ່າ ພຣະອົງກ່າວວ່າ ພຣະອົງ ຮັກໂລກ, ຈົນຍອມເສຍສະລະພຣະຊົນເພື່ອໂລກ, ເພື່ອ ພຣະອົງຈະໄດ້ຮັບພຣະຊົນຄືນອີກ ເພື່ອຕຽມບ່ອນໄວ້ໃຫ້ລູກ ຫລານມະນຸດ.

And again, I remember that thou hast said that thou hast loved the world, even unto the laying down of thy life for the world, that thou mightest take it again to prepare a place for the children of men.

๘๘ ແລະ ບັດນີ້ຂ້ານ້ອຍຮູ້ວ່າ ຄວາມຮັກນີ້ຊຶ່ງພຣະອົງມີຕໍ່ລູກ ຫລານມະນຸດເປັນຄວາມໃຈບຸນ; ດັ່ງນັ້ນ, ຖ້າຫາກມະນຸດບໍ່ມີ ຄວາມໃຈບຸນແລ້ວ ເຂົາຈະຮັບບ່ອນຊຶ່ງພຣະອົງຕຽມໄວ້ໃນຜາ ສາດຂອງພຣະບິດາຂອງພຣະອົງບໍ່ໄດ້.

And now I know that this love which thou hast had for the children of men is charity; wherefore, except men shall have charity they cannot inherit that place which thou hast prepared in the mansions of thy Father.

๘๙ ດັ່ງນັ້ນ, ຂ້ານ້ອຍຮູ້ຈັກສິ່ງເຫລົ່ານີ້ຊຶ່ງພຣະອົງກ່າວ, ວ່າຖ້າ ຫາກຄົນຕ່າງຊາດບໍ່ມີຄວາມໃຈບຸນ, ເພາະຄວາມອ່ອນແອຂອງ ພວກຂ້ານ້ອຍ, ວ່າພຣະອົງຈະພິສູດເຂົາ, ແລະ ເອົາ ພອນ ສະຫວັນໄປຈາກເຂົາ, ແທ້ຈິງແລ້ວ, ເຖິງແມ່ນສິ່ງຊຶ່ງເຂົາໄດ້ຮັບ, ແລະ ຈະມອບໃຫ້ແກ່ຜູ້ທີ່ຈະມີຄວາມໃຈບຸນຢ່າງລົ້ນເຫລືອ.

Wherefore, I know by this thing which thou hast said, that if the Gentiles have not charity, because of our weakness, that thou wilt prove them, and take away their talent, yea, even that which they have received, and give unto them who shall have more abundantly.

๙๐ ແລະ ເຫດການໄດ້ບັງເກີດຂຶ້ນຄື ຂ້າພະເຈົ້າໄດ້ອະທິຖານຫາ ພຣະຜູ້ເປັນເຈົ້າຂໍໃຫ້ພຣະອົງປະທານ ຄຸນງາມຄວາມດີໃຫ້ແກ່ ຄົນຕ່າງຊາດ, ເພື່ອພວກເຂົາຈະໄດ້ມີຄວາມໃຈບຸນ.

And it came to pass that I prayed unto the Lord that he would give unto the Gentiles grace, that they might have charity.

ມ.ກ ແລະ ເຫດການໄດ້ບັງເກີດຂຶ້ນຄື ພຣະຜູ້ເປັນເຈົ້າໄດ້ກ່າວກັບ ຂ້າພະເຈົ້າວ່າ: ຖ້າຫາກພວກເຂົາບໍ່ມີຄວາມໃຈບຸນ ມັນກໍບໍ່ ສຳຄັນສຳລັບເຈົ້າ, ເຈົ້າເປັນຄົນຊື່ສັດ; ດັ່ງນັ້ນ ອາພອນຂອງເຈົ້າ ຈົ່ງຖືກຊຳລະລ້າງໃຫ້ ຂາວສະອາດແລ້ວ. ແລະ ຍ້ອນວ່າເຈົ້າເຫັນ ຄວາມອ່ອນແອຂອງເຈົ້າເອງ, ເຈົ້າຈົ່ງຖືກເຮັດໃຫ້ເຂັ້ມແຂງຂຶ້ນ, ຈົນວ່າສາມາດໄປນັ່ງລົງໃນບ່ອນ ຊຶ່ງເຮົາໄດ້ຕຽມໄວ້ໃນຜາສາດ ຂອງພຣະບິດາຂອງເຮົາ.

And it came to pass that the Lord said unto me: If they have not charity it mattereth not unto thee, thou hast been faithful; wherefore, thy garments shall be made clean. And because thou hast seen thy weakness thou shalt be made strong, even unto the sitting down in the place which I have prepared in the mansions of my Father.

ມ.ຖ ແລະ ບັດນີ້ຂ້າພະເຈົ້າໂມໂຣໄນຂໍກ່າວຄຳອຳລາຄົນຕ່າງຊາດ, ແທ້ຈິງແລ້ວ, ແລະ ທັງພີ່ນ້ອງຂອງຂ້າພະເຈົ້າຜູ້ທີ່ຂ້າພະເຈົ້າ ຮັກແພງນຳອີກ, ຈົນກວ່າພວກເຮົາຈະພົບກັນອີກຕໍ່ໜ້າ ບັນລັງ ພິພາກສາຂອງພຣະຄຣິດ, ຊຶ່ງເປັນບ່ອນທີ່ຄົນທັງໝົດຈະຮູ້ຈັກ ວ່າ ອາພອນຂອງຂ້າພະເຈົ້າບໍ່ມີຈຸດດ່າງດຳດ້ວຍເລືອດຂອງ ທ່ານ.

And now I, Moroni, bid farewell unto the Gentiles, yea, and also unto my brethren whom I love, until we shall meet before the judgment-seat of Christ, where all men shall know that my garments are not spotted with your blood.

ມ.ດ ແລະ ເວລານັ້ນທ່ານຈະຮູ້ວ່າ ຂ້າພະເຈົ້າໄດ້ ເຫັນພຣະເຢຊູ, ແລະ ວ່າພຣະອົງໄດ້ກ່າວກັບຂ້າພະເຈົ້າ ໜ້າຕໍ່ໜ້າ, ແລະ ວ່າ ພຣະອົງໄດ້ກ່າວກັບຂ້າພະເຈົ້າດ້ວຍຄວາມຖ່ອມຕົວຢ່າງ ງ່າຍດາຍ, ຄືກັນກັບຄົນຜູ້ໜຶ່ງເວົ້າກັບຄົນອີກຜູ້ໜຶ່ງໃນພາສາ ຂອງຂ້າພະເຈົ້າເອງກ່ຽວກັບເລື່ອງເຫລົ່ານີ້;

And then shall ye know that I have seen Jesus, and that he hath talked with me face to face, and that he told me in plain humility, even as a man telleth another in mine own language, concerning these things;

ຄ.ວ ແລະ ຂ້າພະເຈົ້າໄດ້ຂຽນໄວ້ພຽງໜ້ອຍດຽວເທົ່ານັ້ນ, ເພາະ ຄວາມອ່ອນແອໃນການຂຽນຂອງຂ້າພະເຈົ້າ.

And only a few have I written, because of my weakness in writing.

ຄ.ຈ ແລະ ບັດນີ້, ຂ້າພະເຈົ້າຂໍແນະນຳໃຫ້ທ່ານ ສະແຫວງຫາ ພຣະເຢຊູອົງນີ້ ຜູ້ຊຶ່ງສາດສະດາ ແລະ ອັກຄະສາວົກໄດ້ຂຽນໄວ້, ເພື່ອພຣະຄຸນຂອງພຣະເຈົ້າອົງເປັນພຣະບິດາ, ແລະ ຂອງອົງ ພຣະເຢຊູຄຣິດເຈົ້ານຳອີກ, ແລະ ພຣະວິນຍານບໍລິສຸດ ຊຶ່ງ ເປັນ ພະຍານເຖິງພວກພຣະອົງ, ເພື່ອຈະຢູ່ນຳ ແລະ ສະຖິດຢູ່ໃນ ທ່ານຕະຫລອດໄປ. ອາແມນ.

And now, I would commend you to seek this Jesus of whom the prophets and apostles have written, that the grace of God the Father, and also the Lord Jesus Christ, and the Holy Ghost, which beareth record of them, may be and abide in you forever. Amen.

ອີເທີ ๑๓

๑ ແລະ ບັດນີ້ຂ້າພະເຈົ້າໂມโรไมจะเล่ม ເຮັດບັນທຶກຂອງ ຂ້າພະເຈົ້າ ໃຫ້ຈົບ ຊຶ່ງ ມັນ ກ່ຽວ ກັບ ຄວາມ ພິນາດ ຂອງ ຜູ້ ຄົນ ຜູ້ ທີ່ ຂ້າ ພະ ເຈົ້າ ໄດ້ ຂຽນ ມາ.

๘ ເພາະ ຈົ່ງ ເບິ່ງ, ພວ ກ ເຂົາ ບໍ່ ຍອ ມ ຮັ ບ ຄ ຳ ທັ ງ ໝົ ດ ຂ ອ ງ ອີ ເ ທີ; ເ ພ າ ະ ວ່ າ ເ ພີ ່ ນ ໄ ດ້ ບ ອ ກ ພ ວ ກ ເ ຂ າ ແ ທ້ ຫ ຼ າ ຍ ເ ຖ ິ ງ ເ ລ ື ່ ອ ງ ທ ັ ງ ໝ ົ ດ ນ ັ ບ ຕ ັ ້ ງ ແ ຕ ່ ກ ານ ເ ລ ີ ່ ມ ຕ ົ ້ ນ ຂ ອ ງ ມ ະ ນ ຸ ດ ເ ປ ັ ນ ຕ ົ ້ ນ ມ າ; ແ ລ ະ ວ ່ າ ຫ ລ ັ ງ ຈ າ ກ ນ ້ ຳ ແ ຫ ້ ງ ລ ົ ງ ຈ າ ກ ແ ຜ ່ ນ ດ ິ ນ ນ ີ ້ ແ ລ ້ ວ ມ ັ ນ ກ ໍ ກ າ ຍ ມ າ ເ ປ ັ ນ ແ ຜ ່ ນ ດ ິ ນ ທ ີ ່ ປ ະ ເ ສ ີ ດ ເ ລ ີ ດ ລ ້ ຳ ກ ວ ່ າ ແ ຜ ່ ນ ດ ິ ນ ອ ື ່ ນ ໆ ທ ັ ງ ໝ ົ ດ, ເ ປ ັ ນ ແ ຜ ່ ນ ດ ິ ນ ທ ີ ່ ພ ຣ ະ ຜ ູ ້ ເ ປ ັ ນ ເ ຈ ົ ້ າ ໄ ດ ້ ເ ລ ື ອ ກ ໄ ວ ້; ດ ັ ່ ງ ນ ັ ້ ນ ພ ຣ ະ ຜ ູ ້ ເ ປ ັ ນ ເ ຈ ົ ້ າ ຈ ຶ ່ ງ ມ ີ ພ ຣ ະ ປ ະ ສ ົ ງ ທ ີ ່ ຈ ະ ໃ ຫ ້ ທ ຸ ກ ຄ ົ ນ ທ ີ ່ ຢ ູ ່ ໃ ນ ໜ ້ າ ແ ຜ ່ ນ ດ ິ ນ ນ ີ ້ ຮ ັ ບ ໃ ຊ ້ ພ ຣ ະ ອ ົ ງ;

๙ ແ ລ ະ ວ ່ າ ມ ັ ນ ຈ ະ ເ ປ ັ ນ ບ ່ ອ ນ ຕ ັ ້ ງ ຂ ອ ງ ເ ມ ື ອ ງ ເ ຢ ຣ ູ ຊ າ ເ ລ ັ ມ ໃ ໝ ່, ຊ ຶ ່ ງ ຈ ະ ລ ົ ງ ມ າ ຈ າ ກ ສ ະ ຫ ວ ັ ນ, ແ ລ ະ ເ ປ ັ ນ ບ ່ ອ ນ ລ ີ້ ໄ ພ ອ ັ ນ ສ ັ ກ ສ ິ ດ ຂ ອ ງ ພ ຣ ະ ຜ ູ ້ ເ ປ ັ ນ ເ ຈ ົ ້ າ.

๔ ຈ ົ ່ ງ ເ ບ ິ ່ ງ, ອ ີ ເ ທ ີ ໄ ດ ້ ເ ຫ ັ ນ ວ ັ ນ ເ ວ ລ າ ຂ ອ ງ ພ ຣ ະ ຄ ຣ ິ ດ, ແ ລ ະ ເ ພ ີ ່ ນ ໄ ດ ້ ເ ວ ົ ້ າ ກ ່ ຽ ວ ກ ັ ບ ເ ມ ື ອ ງ ເ ຢ ຣ ູ ຊ າ ເ ລ ັ ມ ໃ ໝ ່ ຢ ູ ່ ໃ ນ ແ ຜ ່ ນ ດ ິ ນ ນ ີ ້.

๕ ແ ລ ະ ເ ພ ີ ່ ນ ໄ ດ ້ ເ ວ ົ ້ າ ກ ່ ຽ ວ ກ ັ ບ ເ ຊ ື ້ ອ ສ າ ຍ ອ ິ ດ ສ ະ ຣ າ ເ ອ ນ ນ ຳ ອ ີ ກ, ແ ລ ະ ເ ຢ ຣ ູ ຊ າ ເ ລ ັ ມ ຊ ຶ ່ ງ ຈ າ ກ ທ ີ ່ ນ ັ ້ ນ ລ ີ ໄ ຮ ຈ ະ ອ ອ ກ ມ າ—ຫ ລ ັ ງ ຈ າ ກ ທ ີ ່ ມ ັ ນ ຖ ຶ ກ ທ ຳ ລ າ ຍ ແ ລ ້ ວ ມ ັ ນ ຈ ະ ຖ ຶ ກ ສ ້ າ ງ ຂ ຶ ້ ນ ຄ ືນ ອ ີ ກ ໃ ຫ ້ ເ ປ ັ ນ ນ ະ ຄ ອ ນ ສ ັ ກ ສ ິ ດ ແ ດ ່ ພ ຣ ະ ຜ ູ ້ ເ ປ ັ ນ ເ ຈ ົ ້ າ ດ ັ ່ ງ ນ ັ ້ ນ ຈ ະ ເ ປ ັ ນ ເ ຢ ຣ ູ ຊ າ ເ ລ ັ ມ ໃ ໝ ່ ບ ໍ ່ ໄ ດ ້ ເ ພ າ ະ ວ ່ າ ມ ັ ນ ເ ປ ັ ນ ມ າ ແ ລ ້ ວ ໃ ນ ສ ະ ໄ ໝ ກ ່ ອ ນ; ແ ຕ ່ ວ ່ າ ມ ັ ນ ຈ ະ ຖ ຶ ກ ສ ້ າ ງ ຄ ືນ ອ ີ ກ, ແ ລ ະ ກ າ ຍ ເ ປ ັ ນ ນ ະ ຄ ອ ນ ສ ັ ກ ສ ິ ດ ຂ ອ ງ ພ ຣ ະ ຜ ູ ້ ເ ປ ັ ນ ເ ຈ ົ ້ າ; ແ ລ ະ ມ ັ ນ ຈ ະ ຖ ຶ ກ ສ ້ າ ງ ໃ ຫ ້ ແ ກ ່ ເ ຊ ື ້ ອ ສ າ ຍ ອ ິ ດ ສ ະ ຣ າ ເ ອ ນ—

๖ ແ ລ ະ ວ ່ າ ເ ມ ື ອ ງ ເ ຢ ຣ ູ ຊ າ ເ ລ ັ ມ ໃ ໝ ່ ຈ ະ ຖ ຶ ກ ສ ້ າ ງ ຂ ຶ ້ ນ ຢ ູ ່ ໃ ນ ແ ຜ ່ ນ ດ ິ ນ ນ ີ ້ ໃ ຫ ້ ແ ກ ່ ລ ູ ກ ຫ ລ ານ ຂ ອ ງ ໂ ຢ ເ ຊ ັ ບ ທ ີ ່ ເ ຫ ລ ື ອ ຢ ູ ່, ຊ ຶ ່ ງ ສ ິ ່ ງ ເ ຫ ລ ົ ່ າ ນ ີ ້ ມ ັ ນ ມ ີ ແ ບ ບ ຢ ່ າ ງ ມ າ ແ ລ ້ ວ.

๗ ເ ພ າ ະ ວ ່ າ ດ ັ ່ ງ ທ ີ ່ ໂ ຢ ເ ຊ ັ ບ ໄ ດ ້ ນ ຳ ເ ອ ົ າ ບ ິ ດ າ ຂ ອ ງ ເ ພ ີ ່ ນ ໄ ປ ຫ າ ແ ຜ ່ ນ ດ ິ ນ ອ ີ ຢ ິ ບ, ແ ລ ະ ເ ພ ີ ່ ນ ໄ ດ ້ ຕ າ ຍ ຢ ູ ່ ທ ີ ່ ນ ັ ້ ນ; ດ ັ ່ ງ ນ ັ ້ ນ, ພ ຣ ະ ຜ ູ ້ ເ ປ ັ ນ ເ ຈ ົ ້ າ ຈ ຶ ່ ງ ໄ ດ ້ ນ ຳ ເ ອ ົ າ ສ ່ ວ ນ ໜ ຶ ່ ງ ທ ີ ່ ເ ຫ ລ ື ອ ຢ ູ ່ ຂ ອ ງ ລ ູ ກ ຫ ລ ານ ຂ ອ ງ ໂ ຢ ເ ຊ ັ ບ ອ ອ ກ ມ າ ຈ າ ກ ແ ຜ ່ ນ ດ ິ ນ ເ ຢ ຣ ູ ຊ າ ເ ລ ັ ມ, ເ ພ ື ່ ອ ພ ຣ ະ ອ ົ ງ ຈ ະ ໄ ດ ້ ເ ມ ດ ຕ າ ລ ູ ກ ຫ ລ ານ ຂ ອ ງ ໂ ຢ ເ ຊ ັ ບ ເ ພ ື ່ ອ ພ ວ ກ ເ ຂ າ ຈ ະ ບ ໍ ່ ຕ າ ຍ ດ ັ ່ ງ ທ ີ ່ ພ ຣ ະ ອ ົ ງ ໄ ດ ້ ເ ມ ດ ຕ າ ບ ິ ດ າ ຂ ອ ງ ໂ ຢ ເ ຊ ັ ບ ເ ພ ື ່ ອ ເ ພ ີ ່ ນ ຈ ະ ບ ໍ ່ ຕ າ ຍ.

๘ ດ ັ ່ ງ ນ ັ ້ ນ, ເ ຊ ື ້ ອ ສ າ ຍ ທ ີ ່ ເ ຫ ລ ື ອ ຢ ູ ່ ຂ ອ ງ ໂ ຢ ເ ຊ ັ ບ ຈ ະ ຖ ຶ ກ ສ ະ ຖ າ ປ ະ ນ າ ຂ ຶ ້ ນ ໃ ນ ແ ຜ ່ ນ ດ ິ ນ ນ ີ ້; ແ ລ ະ ມ ັ ນ ຈ ະ ເ ປ ັ ນ ແ ຜ ່ ນ ດ ິ ນ ມ ູ ນ ມ ໍ ລ ະ ດ ົ ກ ຂ ອ ງ ພ ວ ກ ເ ຂ າ; ແ ລ ະ ພ ວ ກ ເ ຂ າ ຈ ະ ສ ້ າ ງ ນ ະ ຄ ອ ນ ສ ັ ກ ສ ິ ດ ຖ ວ າ ຍ ແ ດ ່ ພ ຣ ະ ຜ ູ ້ ເ ປ ັ ນ ເ ຈ ົ ້ າ ຄ ື ກ ັ ນ ກ ັ ບ ເ ມ ື ອ ງ ເ ຢ ຣ ູ ຊ າ ເ ລ ັ ມ ໃ ນ ສ ະ ໄ ໝ ກ ່ ອ ນ; ແ ລ ະ ພ ວ ກ ເ ຂ າ ຈ ະ ບ ໍ ່ ສ ັ ບ ສ ົ ນ ອ ີ ກ ຕ ໍ ່ ໄ ປ, ຈ ົ ນ ກ ວ ່ າ ທ ີ ່ ສ ຸ ດ ຈ ະ ມ າ ເ ຖ ິ ງ ເ ມ ື ່ ອ ແ ຜ ່ ນ ດ ິ ນ ໂ ລ ກ ຈ ະ ສ ິ້ ນ ໄ ປ.

Ether 13

And now I, Moroni, proceed to finish my record concerning the destruction of the people of whom I have been writing.

For behold, they rejected all the words of Ether; for he truly told them of all things, from the beginning of man; and that after the waters had receded from off the face of this land it became a choice land above all other lands, a chosen land of the Lord; wherefore the Lord would have that all men should serve him who dwell upon the face thereof;

And that it was the place of the New Jerusalem, which should come down out of heaven, and the holy sanctuary of the Lord.

Behold, Ether saw the days of Christ, and he spake concerning a New Jerusalem upon this land.

And he spake also concerning the house of Israel, and the Jerusalem from whence Lehi should come—after it should be destroyed it should be built up again, a holy city unto the Lord; wherefore, it could not be a new Jerusalem for it had been in a time of old; but it should be built up again, and become a holy city of the Lord; and it should be built unto the house of Israel—

And that a New Jerusalem should be built up upon this land, unto the remnant of the seed of Joseph, for which things there has been a type.

For as Joseph brought his father down into the land of Egypt, even so he died there; wherefore, the Lord brought a remnant of the seed of Joseph out of the land of Jerusalem, that he might be merciful unto the seed of Joseph that they should perish not, even as he was merciful unto the father of Joseph that he should perish not.

Wherefore, the remnant of the house of Joseph shall be built upon this land; and it shall be a land of their inheritance; and they shall build up a holy city unto the Lord, like unto the Jerusalem of old; and they shall no more be confounded, until the end come when the earth shall pass away.

ຄ ແລະ ມັນຈະເປັນສະຫວັນ ໃໝ່ ແລະ ແຜ່ນດິນໂລກໃໝ່; ແລະ ມັນຈະເປັນຄືຂອງເກົ່າ ແຕ່ວ່າຂອງເກົ່າໄດ້ສູນສິ້ນໄປແລ້ວ, ແລະ ທຸກສິ່ງທຸກຢ່າງຈະເປັນຂອງໃໝ່ໝົດ.

And there shall be a new heaven and a new earth; and they shall be like unto the old save the old have passed away, and all things have become new.

ງ ແລະ ຈາກນັ້ນເຢຣູຊາເລັມໃໝ່ຈະມາ; ແລະ ຜູ້ທີ່ອາໄສຢູ່ໃນ ນັ້ນຍ່ອມເປັນສຸກ, ເພາະເຄື່ອງນຸ່ງຫົ່ມຂອງພວກເຂົາ ຂາວ ສະອາດແລ້ວໂດຍທາງໂລຫິດຂອງພຣະເມສານ້ອຍ; ແລະ ເຂົາ ຄືພວກທີ່ຖືກນັບເຂົ້າຢູ່ໃນບັນດາລູກຫລານທີ່ເຫລືອຢູ່ຂອງ ໂຢເຊັບ, ຜູ້ເປັນເຊື້ອສາຍອິດສະຣາເອນ.

And then cometh the New Jerusalem; and blessed are they who dwell therein, for it is they whose garments are white through the blood of the Lamb; and they are they who are numbered among the remnant of the seed of Joseph, who were of the house of Israel.

ຈ ແລະ ຈາກນັ້ນ ເຢຣູຊາເລັມເກົ່າຈະມາອີກ; ແລະ ຜູ້ອາໄສຢູ່ໃນ ນັ້ນຍ່ອມເປັນສຸກ, ເພາະວ່າເຂົາໄດ້ຮັບການຊຳລະລ້າງໃຫ້ຂາວ ສະອາດແລ້ວດ້ວຍໂລຫິດຂອງພຣະເມສານ້ອຍ; ແລະ ເຂົາຄື ພວກທີ່ໄດ້ກະຈັດກະຈາຍກັນໄປ ແລະ ຖືກ ເຄົ້າໂຮມເຂົ້າມາຈາກ ສີ່ສ່ວນຂອງແຜ່ນດິນໂລກ, ແລະ ຈາກແຜ່ນດິນທາງ ເໜືອ ແລະ ເປັນຜູ້ມີສ່ວນໃນການເຮັດໃຫ້ພັນທະສັນຍາຊຶ່ງພຣະເຈົ້າ ໄດ້ເຮັດໄວ້ກັບ ອັບຣາຮາມ, ບັນພະບຸລຸດຂອງເຂົາສຳເລັດ.

And then also cometh the Jerusalem of old; and the inhabitants thereof, blessed are they, for they have been washed in the blood of the Lamb; and they are they who were scattered and gathered in from the four quarters of the earth, and from the north countries, and are partakers of the fulfilling of the covenant which God made with their father, Abraham.

ຊ ແລະ ເວລາທີ່ສິ່ງເຫລົ່ານີ້ມາເຖິງ, ມັນຍ່ອມເຮັດໃຫ້ຂໍ້ຄວາມ ພຣະຄຳພີບັງເກີດຂຶ້ນມາ, ຊຶ່ງກ່າວໄວ້ວ່າ, ຜູ້ເປັນ ຕົ້ນຈະເປັນ ປາຍ, ແລະ ຜູ້ເປັນປາຍຈະເປັນຕົ້ນ.

And when these things come, bringeth to pass the scripture which saith, there are they who were first, who shall be last; and there are they who were last, who shall be first.

ຊສ ແລະ ຂ້າພະເຈົ້າກຳລັງຈະຂຽນຕື່ມອີກແຕ່ວ່າຖືກຫ້າມໄວ້; ຄຳ ທຳນາຍຂອງອີເທີນັ້ນຍິ່ງໃຫຍ່ ແລະ ໜ້າອັດສະຈັນແທ້ໆ; ແຕ່ ພວກເຂົາກໍຖືວ່າ ມັນບໍ່ມີຄຸນຄ່າຫຍັງໝົດ, ແລະ ພວກເຂົາໄດ້ ຂັບໄລ່ເພີ່ນອອກໄປ ແລະ ເພີ່ນໄດ້ໄປລີ້ຊ່ອນຕົວຢູ່ໃນຖ້ຳໃນຕອນ ກາງເວັນ, ແລະ ໃນຕອນກາງຄືນ ເພີ່ນໄດ້ອອກໄປເບິ່ງສິ່ງຕ່າງໆ ທີ່ເກີດຂຶ້ນກັບຜູ້ຄົນ.

And I was about to write more, but I am forbidden; but great and marvelous were the prophecies of Ether; but they esteemed him as naught, and cast him out; and he hid himself in the cavity of a rock by day, and by night he went forth viewing the things which should come upon the people.

ຊສ ແລະ ໃນເວລາທີ່ເພີ່ນລີ້ຢູ່ໃນຖ້ຳນັ້ນ, ເພີ່ນໄດ້ເຮັດບັນທຶກທີ່ ເຫລືອຢູ່ນີ້, ໂດຍເຫັນຄວາມພິນາດທີ່ເກີດກັບຜູ້ຄົນໃນຕອນ ກາງຄືນ.

And as he dwelt in the cavity of a rock he made the remainder of this record, viewing the destructions which came upon the people, by night.

ຊຫ ແລະ ເຫດການໄດ້ບັງເກີດຂຶ້ນຄື ໃນປີດຽວກັນກັບປີທີ່ເພີ່ນ ຖືກຂັບໄລ່ອອກຈາກບັນດາຜູ້ຄົນ ມັນເລີ່ມມີສົງຄາມໃຫຍ່ໃນ ບັນດາຜູ້ຄົນ, ເພາະວ່າມີຫລາຍຄົນຊຶ່ງເປັນພວກຍິ່ງໃຫຍ່ ລຸກຂຶ້ນ, ແລະ ພະຍາຍາມທຳລາຍໂຄຣິອານທະເມີໂດຍໃຊ້ແຜນ ລັບທີ່ຊົ່ວຮ້າຍ ຊຶ່ງໄດ້ກ່າວມາແລ້ວ.

And it came to pass that in that same year in which he was cast out from among the people there began to be a great war among the people, for there were many who rose up, who were mighty men, and sought to destroy Coriantumr by their secret plans of wickedness, of which hath been spoken.

ຊເ ແລະ ບັດນີ້ໂຄຣິອານທະເມີ, ໂດຍທີ່ຕົນເອງໄດ້ຮຽນຮູ້ ວິທີການຂອງສົງຄາມທັງໝົດ, ແລະ ເລ່ຫລ່ຽມທັງໝົດຂອງ ໂລກ, ດັ່ງນັ້ນລາວຈຶ່ງໄດ້ສູ້ຮົບກັບພວກທີ່ພະຍາຍາມທຳລາຍ ລາວ.

And now Coriantumr, having studied, himself, in all the arts of war and all the cunning of the world, wherefore he gave battle unto them who sought to destroy him.

ແຕ່ວ່າລາວບໍ່ໄດ້ກັບໃຈເລີຍ, ທັງບໍ່ມີລູກຊາຍ ຫລື ລູກສາວທີ່ຈົບງາມຂອງລາວຄົນໃດກັບໃຈເລີຍ; ທັງບໍ່ມີລູກຊາຍ ຫລື ລູກສາວທີ່ຈົບງາມຂອງໂຄຣິຮໍຄົນໃດກັບໃຈເລີຍ; ແລະ ໂດຍສະຫລຸບ, ບໍ່ມີລູກຊາຍ ຫລື ລູກສາວທີ່ຈົບງາມຂອງຄົນໃດທັງຜືນແຜ່ນດິນໂລກກັບໃຈຈາກບາບຂອງຕົນເລີຍ.

But he repented not, neither his fair sons nor daughters; neither the fair sons and daughters of Cohor; neither the fair sons and daughters of Corihor; and in fine, there were none of the fair sons and daughters upon the face of the whole earth who repented of their sins.

ດັ່ງນັ້ນ, ເຫດການໄດ້ບັງເກີດຂຶ້ນຄື ໃນປີທຳອິດທີ່ອີເທີອາໄສຢູ່ໃນຖ້ຳນັ້ນ ມີຜູ້ຄົນຢ່າງຫລວງຫລາຍຖືກຂ້າຕາຍໂດຍດາບຂອງ ການມົ້ວສຸມລັບເຫລົ່ານັ້ນ ໃນການຕໍ່ສູ້ກັບໂຄຣິອານທະເມີ ເພື່ອພວກເຂົາຈະໄດ້ຍຶດເອົາອານາຈັກໄປ.

Wherefore, it came to pass that in the first year that Ether dwelt in the cavity of a rock, there were many people who were slain by the sword of those secret combinations, fighting against Coriantumr that they might obtain the kingdom.

ແລະ ເຫດການໄດ້ບັງເກີດຂຶ້ນຄື ພວກລູກຊາຍຂອງໂຄຣິອານທະເມີໄດ້ຕໍ່ສູ້ຢ່າງດຸເດືອດ ແລະ ໄດ້ເສຍເລືອດເນື້ອໄປຢ່າງຫລວງຫລາຍ.

And it came to pass that the sons of Coriantumr fought much and bled much.

ແລະ ໃນປີທີສອງພຣະຄຳຂອງພຣະຜູ້ເປັນເຈົ້າໄດ້ມາຫາອີເທີ, ແລະ ສັ່ງໃຫ້ເພີ່ນໄປທຳນາຍແກ່ ໂຄຣິອານທະເມີວ່າ, ຖ້າຫາກລາວ ແລະ ຄົນໃນຄອບຄົວຂອງລາວທັງໝົດກັບໃຈ, ພຣະຜູ້ເປັນເຈົ້າຈະມອບອານາຈັກໃຫ້ແກ່ລາວ ແລະ ຈະໄວ້ຊີວິດຜູ້ຄົນ—

And in the second year the word of the Lord came to Ether, that he should go and prophesy unto Coriantumr that, if he would repent, and all his household, the Lord would give unto him his kingdom and spare the people—

ຖ້າບໍ່ດັ່ງນັ້ນພວກເຂົາຈະຖືກທຳລາຍພ້ອມກັບຄົນໃນຄອບຄົວຂອງລາວ ຍົກເວັ້ນແຕ່ຕົວລາວເອງ. ແລະ ລາວຈະມີຊີວິດຢູ່ເພື່ອຈະໄດ້ເຫັນຄຳທຳນາຍສຳເລັດ ຊຶ່ງມີເວົ້າໄວ້ກ່ຽວກັບຜູ້ຄົນອີກ ພວກໜຶ່ງທີ່ຈະໄດ້ຮັບແຜ່ນດິນມາເປັນມູນມໍລະດົກຂອງພວກເຂົາ; ແລະ ພວກເຂົາຈະເປັນຜູ້ຝັງສົບຂອງໂຄຣິອານທະເມີ; ແລະ ທຸກຄົນຈະຖືກທຳລາຍໄປຍົກເວັ້ນແຕ່ ໂຄຣິອານທະເມີຄົນດຽວເທົ່ານັ້ນ.

Otherwise they should be destroyed, and all his household save it were himself. And he should only live to see the fulfilling of the prophecies which had been spoken concerning another people receiving the land for their inheritance; and Coriantumr should receive a burial by them; and every soul should be destroyed save it were Coriantumr.

ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທະເມີບໍ່ໄດ້ກັບໃຈເລີຍ, ທັງຄົນໃນຄອບຄົວຂອງລາວ ແລະ ທັງຜູ້ຄົນກໍບໍ່ໄດ້ກັບໃຈ; ແລະ ສົງຄາມກໍບໍ່ໄດ້ຢຸດຕິລົງ, ແລະ ພວກເຂົາພະຍາຍາມທີ່ຈະຂ້າອີເທີ, ແຕ່ວ່າເພີ່ນໄດ້ໜີໄປກ່ອນພວກເຂົາ ແລະ ໄດ້ລີ້ຊ່ອນຕົວຢູ່ໃນຖ້ຳອີກ.

And it came to pass that Coriantumr repented not, neither his household, neither the people; and the wars ceased not; and they sought to kill Ether, but he fled from before them and hid again in the cavity of the rock.

ແລະ ເຫດການໄດ້ບັງເກີດຂຶ້ນຄື ເຊເຣັດໄດ້ຍົກທັບມາ, ແລະ ລາວໄດ້ເຂົ້າມາສູ້ຮົບກັບໂຄຣິອານທະເມີອີກ; ແລະ ລາວໄດ້ຮັບໄຊຊະນະ, ເຖິງຂະໜາດທີ່ໃນປີທີສາມ ລາວໄດ້ເອົາໂຄຣິອານທະເມີມາເປັນຊະເລີຍ.

And it came to pass that there arose up Shared, and he also gave battle unto Coriantumr; and he did beat him, insomuch that in the third year he did bring him into captivity.

ແລະ ໃນປີທີສີ່ ລູກຊາຍຂອງໂຄຣິອານທະເມີໄດ້ເອົາຊະນະ ເຊເຣັດ, ແລະ ໄດ້ຍຶດເອົາອານາຈັກຄືນມາໃຫ້ບິດາຂອງຕົນອີກ.

And the sons of Coriantumr, in the fourth year, did beat Shared, and did obtain the kingdom again unto their father.

ບັດນີ້ມັນໄດ້ມີສົງຄາມເກີດຂຶ້ນທົ່ວຜືນແຜ່ນດິນ, ທຸກຄົນພ້ອມດ້ວຍພັກຂອງຕົນກໍໄດ້ຕໍ່ສູ້ເພື່ອສິ່ງທີ່ຕົນປາດຖະໜາ.

Now there began to be a war upon all the face of the land, every man with his band fighting for that which he desired.

ຄ໘ ແລະ ໂດຍສະຫລຸບ, ມັນມີພວກໂຈນ ແລະ ມີຄວາມຊົ່ວຮ້າຍ ນາໆປະການຢູ່ທົ່ວຜືນແຜ່ນດິນ.

ຄ໗ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທະເມີໄດ້ຄຽດ ແຄ້ນໃຫ້ເຊເຣັດຫລາຍທີ່ສຸດ, ແລະ ລາວໄດ້ຍົກທັບໄປພ້ອມ ດ້ວຍກອງທັບຂອງລາວ ເພື່ອໄປສູ້ຮົບ; ແລະ ທັງສອງໄດ້ ປະທະກັນດ້ວຍຄວາມຄຽດແຄ້ນອັນຮ້າຍແຮງ; ແລະ ທັງສອງ ໄດ້ປະທະກັນໃນຮ່ອມພູກິນການ; ແລະ ການສູ້ຮົບນັ້ນກັບມາ ຮ້າຍແຮງທີ່ສຸດ.

ຄ໘ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຊເຣັດໄດ້ຕໍ່ສູ້ເປັນເວລາສາມ ມື້. ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທະເມີໄດ້ເອົາ ຊະນະລາວ, ແລະ ໄດ້ຕິດຕາມລາວໄປຈົນວ່າໄປຮອດທົ່ງພຽງເຮ ຊະລອນ.

ຄ໙ ແລະ ເຫດການໄດ້ບັງເກີດຂຶ້ນຄື ເຊເຣັດໄດ້ສູ້ຮົບກັບລາວອີກ ໃນທົ່ງພຽງນັ້ນ; ແລະ ຈົ່ງເບິ່ງ, ລາວໄດ້ເອົາຊະນະໂຄຣິອານທະ ເມີ, ແລະ ໄດ້ຂັບໄລ່ລາວໃຫ້ຄືນໄປຫາຮ່ອມພູກິນການອີກ.

ມ໐ ແລະ ໂຄຣິອານທະເມີໄດ້ສູ້ຮົບກັບເຊເຣັດອີກໃນຮ່ອມພູ ກິນການ, ຊຶ່ງລາວໄດ້ຮັບໄຊຊະນະ ແລະ ລາວໄດ້ຂ້າເຊເຣັດ.

ມ໑ ແລະ ເຊເຣັດໄດ້ເຮັດໃຫ້ໂຄຣິອານທະເມີໄດ້ຮັບບາດເຈັບທີ່ກົກ ຂາ, ຈົນວ່າລາວບໍ່ໄດ້ອອກໄປສູ້ຮົບອີກເປັນເວລາສອງປີ, ຊຶ່ງໃນ ໄລຍະເວລານັ້ນຜູ້ຄົນທັງໝົດໃນຜືນແຜ່ນດິນກຳລັງຂ້າຟັນກັນ ຢູ່, ແລະ ບໍ່ມີຜູ້ໃດຫ້າມປາມພວກເຂົາເລີຍ.

And there were robbers, and in fine, all manner of wickedness upon all the face of the land.

And it came to pass that Coriantumr was exceedingly angry with Shared, and he went against him with his armies to battle; and they did meet in great anger, and they did meet in the valley of Gilgal; and the battle became exceedingly sore.

And it came to pass that Shared fought against him for the space of three days. And it came to pass that Coriantumr beat him, and did pursue him until he came to the plains of Heshlon.

And it came to pass that Shared gave him battle again upon the plains; and behold, he did beat Coriantumr, and drove him back again to the valley of Gilgal.

And Coriantumr gave Shared battle again in the valley of Gilgal, in which he beat Shared and slew him.

And Shared wounded Coriantumr in his thigh, that he did not go to battle again for the space of two years, in which time all the people upon the face of the land were shedding blood, and there was none to restrain them.

ອີເທີ ๑๔

๑ ແລະ ບັດນີ້ມັນເລີ່ມມີຄຳ ສາບແຊ່ງອັນໃຫຍ່ຫລວງທົ່ວ ແຜ່ນດິນ ເພາະຄວາມຊົ່ວຮ້າຍຂອງຜູ້ຄົນ, ຊຶ່ງໃນຄຳສາບແຊ່ງ ນັ້ນ, ຖ້າຫາກຜູ້ໃດຈະວາງອາວຸດ ຫລື ດາບໄວ້ເທິງຮ້ານ ຫລື ເກັບມ້ຽນໄວ້ບ່ອນທີ່ຕົນເຄີຍເອົາໄວ້, ຈົ່ງເບິ່ງ, ໃນມື້ຕໍ່ມາ, ພວກ ເຂົາຈະຫາມັນບໍ່ພົບ, ເພາະວ່າຄຳສາບແຊ່ງທົ່ວແຜ່ນດິນນັ້ນ ໃຫຍ່ຫລວງທີ່ສຸດ.

๒ ດັ່ງນັ້ນ ທຸກໆຄົນຈຶ່ງເກັບກຳສິ່ງທີ່ຕົນເປັນເຈົ້າຂອງໄວ້ໃກ້ມື, ແລະ ຈະບໍ່ຢືມຂອງຜູ້ໃດ, ທັງບໍ່ເອົາໃຫ້ຜູ້ໃດຢືມ; ທຸກໆຄົນໄດ້ ຈັບດ້າມດາບຂອງຕົນໄວ້ໃນມືຂວາ, ເພື່ອປ້ອງກັນຊັບສົມບັດ ຂອງຕົນ, ແລະ ຊີວິດຂອງຕົນ ພ້ອມທັງເມຍຂອງຕົນ ແລະ ລູກ ຂອງຕົນ.

๓ ແລະ ບັດນີ້, ຫລັງຈາກສອງປີຜ່ານໄປ, ແລະ ຫລັງຈາກການ ຕາຍຂອງເຊເຮັດ, ຈົ່ງເບິ່ງ, ນ້ອງຊາຍຂອງເຊເຮັດໄດ້ຍົກທັບມາ ແລະ ລາວໄດ້ສູ້ຮົບກັບໂຄຣິອານທະເມີ, ຊຶ່ງເປັນເຫດໃຫ້ໂຄຣິ ອານທະເມີໄດ້ຮັບໄຊຊະນະ ແລະ ໄດ້ໄລ່ຕິດຕາມລາວໄປໃນຖິ່ນ ແຫ້ງແລ້ງກັນດານເອຄິດ.

๔ ແລະ ເຫດການໄດ້ບັງເກີດຂຶ້ນຄື ນ້ອງຊາຍຂອງເຊເຮັດໄດ້ສູ້ ຮົບກັບລາວຢູ່ໃນຖິ່ນແຫ້ງແລ້ງກັນດານເອຄິດ, ແລະ ການສູ້ຮົບ ນັ້ນຮ້າຍແຮງທີ່ສຸດ, ແລະ ຄົນເປັນຈຳນວນຫລາຍພັນຄົນໄດ້ລົ້ມ ຕາຍໄປດ້ວຍດາບ.

๕ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທະເມີໄດ້ປິດລ້ອມ ຖິ່ນແຫ້ງແລ້ງກັນດານໄວ້; ແລະ ນ້ອງຊາຍຂອງເຊເຮັດໄດ້ຍົກ ທັບອອກຈາກຖິ່ນແຫ້ງແລ້ງກັນດານໃນເວລາກາງຄືນ, ແລະ ໄດ້ຂ້າຄົນໃນກອງທັບຂອງໂຄຣິອານທະເມີສ່ວນໜຶ່ງ, ໃນຂະນະ ທີ່ພວກເຂົາເມົາເຫລົ້າຢູ່.

๖ ແລະ ລາວໄດ້ຍົກທັບມາຮອດແຜ່ນດິນໂມຣັນ, ແລະ ໄດ້ຂຶ້ນ ນັ່ງບັນລັງແທນໂຄຣິອານທະເມີ.

๗ ແລະ ເຫດການໄດ້ບັງເກີດຂຶ້ນຄື ໂຄຣິອານທະເມີໄດ້ອາໄສຢູ່ ນຳກອງທັບຂອງລາວໃນຖິ່ນແຫ້ງແລ້ງກັນດານເປັນເວລາສອງ ປີ, ຊຶ່ງເປັນເຫດໃຫ້ລາວໄດ້ຮັບກຳລັງມາໃຫ້ກອງທັບຂອງລາວ ຫລາຍຂຶ້ນ.

๘ ບັດນີ້ນ້ອງຊາຍຂອງເຊເຮັດ, ຊຶ່ງມີຊື່ວ່າ ກີເລອາດ, ກໍໄດ້ຮັບ ກຳລັງມາໃຫ້ກອງທັບຂອງລາວຫລາຍຂຶ້ນ, ຍ້ອນວ່າການມົ້ວ ສຸມລັບ.

And he hath said: Repent all ye ends of the earth, and come unto me, and be baptized in my name, and have faith in me, that ye may be saved.

And now, my beloved brethren, if this be the case that these things are true which I have spoken unto you, and God will show unto you, with power and great glory at the last day, that they are true, and if they are true has the day of miracles ceased?

๘๒ ເພາະວ່າພຣະອົງໄດ້ຕອບທີ່ສຸດຂອງກົດແລ້ວ, ແລະ ພຣະອົງຂໍຮັບເອົາຄົນທັງປວງທີ່ມີສັດທາໃນພຣະອົງ; ແລະ ຄົນທີ່ມີສັດທາໃນພຣະອົງຈະ ແນບສະໜິດໃນທຸກສິ່ງທີ່ດີ; ດັ່ງນັ້ນ ພຣະອົງຈຶ່ງ ວິງວອນແທນລູກຫລານມະນຸດ; ແລະ ພຣະອົງ ປະທັບຢູ່ເປັນນິລັນດອນໃນຟ້າສະຫວັນ.

๘๓ ແລະ ເພາະພຣະອົງໄດ້ກະທຳການນີ້, ພີ່ນ້ອງທີ່ຮັກແພງ ຂອງຂ້າພະເຈົ້າ ສິ່ງມະຫັດສະຈັນໝົດໄປແລ້ວບໍ? ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບທ່ານວ່າ, ບໍ່ເລີຍ; ແລະ ທັງເທລົ່າທູດກໍບໍ່ໄດ້ ເລີກປະຕິບັດສາດສະໜາກິດແກ່ລູກຫລານມະນຸດເລີຍ.

๓๐ ເພາະຈົ່ງເບິ່ງ, ພວກເພິ່ນຂຶ້ນຢູ່ກັບພຣະອົງ, ເພື່ອປະຕິບັດ ສາດສະໜາກິດຕາມຄຳບັນຊາຂອງພຣະອົງ, ໂດຍສະແດງຕົວ ແກ່ຜູ້ມີສັດທາຢ່າງເຂັ້ມແຂງ ແລະ ມີຈິດໃຈໝັ້ນຄົງໃນຄວາມ ເປັນເໝືອນພຣະເຈົ້າທຸກແບບ.

๓๑ ແລະ ໜ້າທີ່ປະຕິບັດສາດສະໜາກິດຂອງພວກເພິ່ນຄື ຮຽກຮ້ອງມະນຸດມາສູ່ການກັບໃຈ, ແລະ ເພື່ອເຮັດໃຫ້ວຽກງານ ແຫ່ງພັນທະສັນຍາຂອງພຣະບິດາສຳເລັດ, ຊຶ່ງພຣະອົງກະທຳ ໄວ້ກັບລູກຫລານມະນຸດ, ເພື່ອຕຽມທາງໃນບັນດາລູກຫລານ ມະນຸດ, ໂດຍການປະກາດພຣະຄຳຂອງພຣະຄຣິດແກ່ພາຊະນະ ທີ່ພຣະຜູ້ເປັນເຈົ້າເລືອກໄວ້, ເພື່ອເຂົາຈະສະແດງປະຈັກ ພະຍານເຖິງພຣະອົງ.

๓๒ ແລະ ໂດຍການກະທຳເຊັ່ນນັ້ນ, ອົງພຣະຜູ້ເປັນເຈົ້າຈຶ່ງໄດ້ ຕຽມທາງເພື່ອມະນຸດທີ່ເຫລືອຢູ່ຈະມີ ສັດທາໃນພຣະຄຣິດ, ວ່າ ພຣະວິນຍານບໍລິສຸດຈະມີບ່ອນຢູ່ໃນໃຈຂອງເຂົາຕາມອຳນາດ ຂອງພຣະອົງ; ແລະ ຕາມວິທີນີ້ ພຣະບິດາຈະນຳພັນທະສັນຍາ ມາ ຊຶ່ງພຣະອົງໄດ້ເຮັດໄວ້ກັບລູກຫລານມະນຸດ.

๓๓ ແລະ ພຣະຄຣິດໄດ້ກ່າວວ່າ: ຖ້າຫາກເຈົ້າມີສັດທາໃນເຮົາ, ເຈົ້າຈະມີອຳນາດເຮັດສິ່ງໃດກໍໄດ້ຕາມທີ່ເຮົາເຫັນວ່າ ສົມຄວນ.

๓๔ ແລະ ພຣະອົງໄດ້ກ່າວວ່າ: ຈົ່ງ ກັບໃຈເຖີດ ເຈົ້າທັງຫລາຍ ທີ່ສຸດຂອງແຜ່ນດິນໂລກ, ແລະ ຈົ່ງມາຫາເຮົາ, ແລະ ຮັບ ບັບຕິສະມາໃນພຣະນາມຂອງເຮົາ, ແລະ ມີສັດທາໃນເຮົາ, ເພື່ອ ເຈົ້າຈະລອດ.

๓๕ ແລະ ບັດນີ້, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຖ້າຫາກ ເປັນໄປວ່າເລື່ອງເຫລົ່ານີ້ຊຶ່ງຂ້າພະເຈົ້າໄດ້ເວົ້າກັບທ່ານເປັນ ຄວາມຈິງແລ້ວ ພຣະເຈົ້າຈະສະແດງແກ່ທ່ານດ້ວຍ ອຳນາດ ແລະ ລັດສະໝີພາບອັນຍິ່ງໃຫຍ່ໃນ ວັນສຸດທ້າຍ, ວ່າເລື່ອງ ເຫລົ່ານີ້ເປັນຄວາມຈິງ, ແລະ ຖ້າຫາກມັນເປັນຄວາມຈິງ ວັນ ແຫ່ງສິ່ງມະຫັດສະຈັນໝົດໄປແລ້ວບໍ?

ມ໕ ຫລື ເທລົ່າທູດເລີກມາປະກົດຕົວແກ່ລູກຫລານມະນຸດແລ້ວບໍ? ຫລື ພຣະອົງໄດ້ ເກັບອຳນາດຂອງພຣະວິນຍານບໍລິສຸດໄປ ຈາກເຂົາແລ້ວບໍ? ຫລື ພຣະອົງຈະກະທຳ ຕາບໃດທີ່ເວລາຍັງ ເຫລືອຢູ່, ຫລື ໂລກຍັງຕັ້ງຢູ່, ຫລື ຍັງມີຄົນຜູ້ດຽວເຫລືອຢູ່ໃນ ໜ້າແຜ່ນດິນໂລກທີ່ຈະຊ່ວຍໃຫ້ລອດ?

ມ໖ ຈົ່ງເບິ່ງຂ້າພະເຈົ້າກ່າວກັບທ່ານວ່າ, ບໍ່ເລີຍ; ເພາະເປັນຍ້ອນ ສັດທາ ສິ່ງມະຫັດສະຈັນຈຶ່ງເກີດຂຶ້ນ; ແລະ ເປັນຍ້ອນສັດທາ ເທລົ່າທູດຈຶ່ງໄດ້ມາປະກົດຕົວ ແລະ ປະຕິບັດສາດສະໜາກິດ ແກ່ມະນຸດ; ດັ່ງນັ້ນ, ຖ້າຫາກສິ່ງເຫລົ່ານີ້ໝົດໄປ ວິບັດຍ່ອມມີ ແກ່ລູກຫລານມະນຸດ, ເພາະມັນເປັນຍ້ອນ ຄວາມບໍ່ເຊື່ອຖື, ແລະ ທຸກສິ່ງກໍບໍ່ມີປະໂຫຍດ.

ມ໗ ເພາະຕາມພຣະຄຳຂອງພຣະຄຣິດແລ້ວ, ບໍ່ມີຜູ້ໃດຈະລອດ ໄດ້ນອກຈາກເຂົາຈະມີສັດທາໃນພຣະນາມຂອງພຣະອົງ; ດັ່ງນັ້ນ, ຖ້າຫາກສິ່ງເຫລົ່ານີ້ໝົດໄປ, ແລ້ວສັດທາກໍໝົດໄປຄືກັນ; ແລະ ສະພາບຂອງມະນຸດຈະເປັນຕາຢ້ານຫລາຍຂະໜາດ ໃດ, ເພາະເຂົາຈະເປັນຄືກັນກັບວ່າບໍ່ມີການໄຖ່ກະທຳຂຶ້ນເລີຍ.

ມ໘ ແຕ່ຈົ່ງເບິ່ງ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າ ຕັດສິນສິ່ງທີ່ດີກວ່ານີ້ຈາກທ່ານ, ເພາະຂ້າພະເຈົ້າຕັດສິນວ່າ ທ່ານມີສັດທາໃນພຣະຄຣິດເພາະຄວາມອ່ອນໂยນຂອງທ່ານ ເພາະຖ້າຫາກທ່ານບໍ່ມີສັດທາໃນພຣະອົງແລ້ວ, ທ່ານກໍບໍ່ ເໝາະສົມທີ່ຈະຖືກນັບເຂົ້າຢູ່ໃນບັນດາຜູ້ຄົນຂອງສາດສະໜາ ຈັກຂອງພຣະອົງ.

ຄ໐ ແລະ ອີກຢ່າງໜຶ່ງ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າຂໍເວົ້າກັບທ່ານກ່ຽວກັບ ຄວາມຫວັງ. ທ່ານຈະບັນລຸ ເຖິງສັດທາໄດ້ແນວໃດຖ້າຫາກທ່ານບໍ່ມີຄວາມຫວັງ?

ຄ໑ ແລະ ແມ່ນອັນໃດທີ່ທ່ານຈະມີ ຄວາມຫວັງຕໍ່? ຈົ່ງເບິ່ງ ຂ້າພະເຈົ້າກ່າວກັບທ່ານວ່າ ທ່ານຈະມີ ຄວາມຫວັງໂດຍທາງ ການຊົດໃຊ້ຂອງພຣະຄຣິດ ແລະ ໂດຍອຳນາດຂອງການຟື້ນຄືນ ພຣະຊົນຂອງພຣະອົງ, ເພື່ອຖືກຍົກຂຶ້ນສູ່ ຊີວິດນິລັນດອນ, ແລະ ນີ້ເພາະສັດທາຂອງທ່ານທີ່ມີໃນພຣະອົງຕາມສັນຍາ.

ຄ໒ ດັ່ງນັ້ນ, ຖ້າຫາກຜູ້ໃດມີ ສັດທາກໍ ຈຳຕ້ອງມີຄວາມຫວັງ; ເພາະວ່າປາດສະຈາກສັດທາຈະມີຄວາມຫວັງບໍ່ໄດ້ເລີຍ.

ຄ໓ ແລະ ອີກຢ່າງໜຶ່ງ, ຈົ່ງເບິ່ງຂ້າພະເຈົ້າກ່າວກັບທ່ານວ່າ ມະນຸດຈະມີສັດທາ ແລະ ຄວາມຫວັງບໍ່ໄດ້, ນອກຈາກວ່າເຂົາຈະ ມີ ໃຈອ່ອນໂยນ ແລະ ຕ່ຳຕ້ອຍ.

Or have angels ceased to appear unto the children of men? Or has he withheld the power of the Holy Ghost from them? Or will he, so long as time shall last, or the earth shall stand, or there shall be one man upon the face thereof to be saved?

Behold I say unto you, Nay; for it is by faith that miracles are wrought; and it is by faith that angels appear and minister unto men; wherefore, if these things have ceased wo be unto the children of men, for it is because of unbelief, and all is vain.

For no man can be saved, according to the words of Christ, save they shall have faith in his name; wherefore, if these things have ceased, then has faith ceased also; and awful is the state of man, for they are as though there had been no redemption made.

But behold, my beloved brethren, I judge better things of you, for I judge that ye have faith in Christ because of your meekness; for if ye have not faith in him then ye are not fit to be numbered among the people of his church.

And again, my beloved brethren, I would speak unto you concerning hope. How is it that ye can attain unto faith, save ye shall have hope?

And what is it that ye shall hope for? Behold I say unto you that ye shall have hope through the atonement of Christ and the power of his resurrection, to be raised unto life eternal, and this because of your faith in him according to the promise.

Wherefore, if a man have faith he must needs have hope; for without faith there cannot be any hope.

And again, behold I say unto you that he cannot have faith and hope, save he shall be meek, and lowly of heart.

ຖ້າຫາກເປັນເຊັ່ນນັ້ນ, ສັດທາ ແລະ ຄວາມຫວັງຂອງເຂົາກໍ
ບໍ່ມີປະໂຫຍດ ເພາະວ່າຄົນເຊັ່ນນັ້ນຈະບໍ່ເປັນທີ່ຍອມຮັບຕໍ່
ພຣະພັກຂອງພຣະເຈົ້າ ນອກຈາກຜູ້ທີ່ມີໃຈອ່ອນໂยน ແລະ ຕ່ຳ
ຕ້ອຍ, ແລະ ຖ້າຫາກຜູ້ໃດອ່ອນໂยน ແລະ ຕ່ຳຕ້ອຍໃນໃຈ, ແລະ
ສາລະພາບໂດຍອຳນາດຂອງພຣະວິນยานບໍລິສຸດว่าพระเยซู
ຄື ພຣະຄຣິດ, ຜູ້ນັ້ນຕ້ອງມີຄວາມໃຈບຸນ, ເພາະຖ້າຫາກເຂົາບໍ່ມີ
ຄວາມໃຈບຸນ ເຂົາກໍບໍ່ເປັນອັນໃດເລີຍ; ດັ່ງນັ້ນ ເຂົາຕ້ອງມີຄວາມ
ໃຈບຸນ.

If so, his faith and hope is vain, for none is acceptable before God, save the meek and lowly in heart; and if a man be meek and lowly in heart, and confesses by the power of the Holy Ghost that Jesus is the Christ, he must needs have charity; for if he have not charity he is nothing; wherefore he must needs have charity.

ແລະ ຄວາມໃຈບຸນອົດທົນໄດ້ດົນນານ, ແລະ ມີຄວາມ
ເມດຕາ, ແລະ ບໍ່ ອິດສາບັງບຽດ, ແລະ ບໍ່ອວດອົ່ງ, ແລະ ບໍ່
ສະແຫວງຫາເພື່ອຕົນເອງ, ບໍ່ຄຽດງ່າຍ, ບໍ່ຄິດຊົ່ວ, ແລະ ບໍ່
ປິຕິຍິນດີໃນຄວາມຊົ່ວຮ້າຍ ແຕ່ປິຕິຍິນດີໃນຄວາມຈິງ, ທົນແບກ
ຫາບທຸກສິ່ງ, ເຊື່ອທຸກສິ່ງ, ຫວັງທຸກສິ່ງ, ອົດທົນທຸກສິ່ງ.

And charity suffereth long, and is kind, and envieth not, and is not puffed up, seeketh not her own, is not easily provoked, thinketh no evil, and rejoiceth not in iniquity but rejoiceth in the truth, beareth all things, believeth all things, hopeth all things, endureth all things.

ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຖ້າຫາກທ່ານ
ບໍ່ມີຄວາມໃຈບຸນ, ທ່ານກໍບໍ່ມີຄ່າອັນໃດເລີຍ, ເພາະຄວາມໃຈບຸນ
ດຳລົງຢູ່ຕະຫລອດໄປ. ດັ່ງນັ້ນ, ຈົ່ງຍຶດໝັ້ນຢູ່ກັບຄວາມໃຈບຸນ,
ຊຶ່ງເປັນສິ່ງທີ່ຍິ່ງໃຫຍ່ທີ່ສຸດໃນທຸກສິ່ງ, ເພາະວ່າທຸກສິ່ງຕ້ອງ
ໝົດສິ້ນໄປ—

Wherefore, my beloved brethren, if ye have not charity, ye are nothing, for charity never faileth. Wherefore, cleave unto charity, which is the greatest of all, for all things must fail—

ແຕ່ ຄວາມໃຈບຸນຄື ຄວາມຮັກອັນບໍລິສຸດຂອງພຣະຄຣິດ,
ແລະ ມັນອົດທົນຕະຫລອດການ; ແລະ ຜູ້ໃດຖືກພົບว่ามีมัน
ໃນວັນສຸດທ້າຍ, ຍ່ອມຈະເປັນການດີກັບຜູ້ນັ້ນ.

But charity is the pure love of Christ, and it endureth forever; and whoso is found possessed of it at the last day, it shall be well with him.

ດັ່ງນັ້ນ, ພີ່ນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຈົ່ງ ອະທິຖານ
ຫາພຣະບິດາດ້ວຍສຸດພະລັງແຫ່ງໃຈ, ເພື່ອທ່ານຈະເຕັມໄປ
ດ້ວຍຄວາມຮັກນີ້, ຊຶ່ງພຣະອົງປະທານໃຫ້ທຸກຄົນຊຶ່ງເປັນ ຜູ້
ຕິດຕາມທີ່ແທ້ຈິງຂອງພຣະເຢຊູຄຣິດ, ພຣະບຸດຂອງພຣະອົງ;
ເພື່ອທ່ານຈະໄດ້ກາຍເປັນບຸດຂອງພຣະເຈົ້າ; ເພື່ອວ່າ ເມື່ອ
ພຣະອົງສະເດັດມາ ເຮົາຈະ ເປັນເໝືອນດັ່ງພຣະອົງ, ເພາະວ່າ
ເຮົາຈະເຫັນພຣະອົງຢ່າງທີ່ພຣະອົງເປັນຢູ່ນັ້ນ, ເພື່ອເຮົາຈະມີ
ຄວາມຫວັງນີ້; ເພື່ອເຮົາຈະຖືກ ເຮັດໃຫ້ບໍລິສຸດຄືກັນກັບ
ພຣະອົງທີ່ບໍລິສຸດ. ອາແມນ.

Wherefore, my beloved brethren, pray unto the Father with all the energy of heart, that ye may be filled with this love, which he hath bestowed upon all who are true followers of his Son, Jesus Christ; that ye may become the sons of God; that when he shall appear we shall be like him, for we shall see him as he is; that we may have this hope; that we may be purified even as he is pure. Amen.

ໂມໂຣໄນ ๘

Moroni 8

๑ ສານສະບັບໜຶ່ງຂອງ ບິດາຂອງຂ້າພະເຈົ້າມໍມອນທີ່ຂຽນຫາຂ້າພະເຈົ້າໂມໂຣໄນ; ແລະ ເພິ່ນໄດ້ຂຽນຫາຂ້າພະເຈົ້າບໍ່ດົນຫລັງຈາກການເອີ້ນສູ່ການປະຕິບັດສາດສະໜາກິດຂອງຂ້າພະເຈົ້າ. ແລະ ເພິ່ນໄດ້ຂຽນຫາຂ້າພະເຈົ້າໃນທຳນອງນີ້, ມີຄວາມວ່າ:

An epistle of my father Mormon, written to me, Moroni; and it was written unto me soon after my calling to the ministry. And on this wise did he write unto me, saying:

๒ ໂມໂຣໄນລູກທີ່ຮັກຂອງພໍ່, ພໍ່ມີຄວາມປິຕິຍິນດີຢ່າງຍິ່ງທີ່ອົງພຣະເຢຊູຄຣິດເຈົ້າຂອງລູກນຶກເຖິງລູກ, ແລະ ເອີ້ນລູກມາສູ່ການປະຕິບັດສາດສະໜາກິດຂອງພຣະອົງ, ແລະ ມາສູ່ວຽກງານອັນສັກສິດຂອງພຣະອົງ.

My beloved son, Moroni, I rejoice exceedingly that your Lord Jesus Christ hath been mindful of you, and hath called you to his ministry, and to his holy work.

๓ ພໍ່ນຶກເຖິງລູກສະເໝີໃນຄຳອະທິຖານຂອງພໍ່, ໂດຍການອະທິຖານຫາພຣະເຈົ້າອົງເປັນພຣະບິດາຕະຫລອດເວລາໃນພຣະນາມຂອງພຣະເຢຊູ, ພຣະບຸດຜູ້ບໍລິສຸດຂອງພຣະອົງ, ເພື່ອໂດຍທາງ ພຣະກະລຸນາທິຄຸນ ແລະ ພຣະຄຸນອັນບໍ່ມີຂອບເຂດຂອງພຣະອົງ, ພຣະອົງຈະປົກປັກຮັກສາລູກ ໂດຍທາງຄວາມອົດທົນແຫ່ງສັດທາໃນພຣະນາມຂອງພຣະອົງ ຈົນເຖິງທີ່ສຸດ.

I am mindful of you always in my prayers, continually praying unto God the Father in the name of his Holy Child, Jesus, that he, through his infinite goodness and grace, will keep you through the endurance of faith on his name to the end.

๔ ແລະ ບັດນີ້, ລູກຂອງພໍ່, ພໍ່ຂໍເວົ້າກັບລູກກ່ຽວກັບເລື່ອງທີ່ເຮັດໃຫ້ພໍ່ໂສກເສົ້າຫລາຍທີ່ສຸດ; ເພາະມັນເຮັດໃຫ້ພໍ່ໂສກເສົ້າທີ່ມີ ການໂຕ້ຖຽງກັນຢູ່ໃນບັນດາພວກລູກ.

And now, my son, I speak unto you concerning that which grieveth me exceedingly; for it grieveth me that there should disputations rise among you.

๕ ເພາະຖ້າຫາກເລື່ອງທີ່ພໍ່ຮູ້ມານັ້ນເປັນຄວາມຈິງ, ມັນໄດ້ມີການໂຕ້ຖຽງກັນໃນບັນດາພວກລູກກ່ຽວກັບການບັບຕິສະມາໃຫ້ແກ່ເດັກນ້ອຍໆ.

For, if I have learned the truth, there have been disputations among you concerning the baptism of your little children.

๖ ແລະ ບັດນີ້, ລູກຂອງພໍ່, ພໍ່ປາດຖະໜາໃຫ້ລູກເຮັດວຽກຢ່າງພາກພຽນ, ເພື່ອຈະເອົາຄວາມຜິດອັນຮ້າຍແຮງນີ້ໄປຈາກບັນດາພວກລູກ; ເພາະຄ້ອຍເຈດຕະນານີ້ ພໍ່ຈຶ່ງໄດ້ຂຽນສານມາຫາລູກ.

And now, my son, I desire that ye should labor diligently, that this gross error should be removed from among you; for, for this intent I have written this epistle.

๗ ເພາະໃນທັນທີທີ່ພໍ່ຮູ້ຈັກເລື່ອງເຫລົ່ານີ້ກ່ຽວກັບພວກລູກ ພໍ່ກໍໄດ້ທູນຖາມພຣະຜູ້ເປັນເຈົ້າກ່ຽວກັບເລື່ອງນີ້. ແລະ ພຣະຄຳຂອງພຣະຜູ້ເປັນເຈົ້າໄດ້ມາເຖິງພໍ່ໂດຍອຳນາດຂອງພຣະວິນຍານບໍລິສຸດ, ມີຄວາມວ່າ:

For immediately after I had learned these things of you I inquired of the Lord concerning the matter. And the word of the Lord came to me by the power of the Holy Ghost, saying:

๘ ຈົ່ງຟັງພຣະຄຳຂອງພຣະຄຣິດ, ພຣະຜູ້ໄຖ່ຂອງລູກ, ພຣະຜູ້ເປັນເຈົ້າ ແລະ ພຣະເຈົ້າຂອງເຈົ້າ. ຈົ່ງເບິ່ງ, ເຮົາມາໃນໂລກນີ້ບໍ່ແມ່ນເພື່ອເອີ້ນເອົາຄົນຊອບທຳ ແຕ່ເພື່ອເອີ້ນເອົາຄົນບາບມາສູ່ການກັບໃຈ; ຄົນທີ່ສະບາຍບໍ່ຕ້ອງການໝໍ, ແຕ່ຄົນທີ່ເຈັບປ່ວຍຕ້ອງການໝໍ; ດັ່ງນັ້ນ, ເດັກນ້ອຍໆ ເປັນຄົນດີເພາະພວກເຂົາບໍ່ສາມາດເຮັດ ບາບໄດ້; ດັ່ງນັ້ນ ໃນເຮົາ, ການສາບແຊ່ງທີ່ມີກັບອາດາມຈຶ່ງຖືກເອົາໄປຈາກເຂົາ; ແລະ ໃນເຮົາ, ກົດກ່ຽວກັບ ພິທີຕັດຈຶ່ງຖືກເອົາໄປຈາກເຂົາ.

Listen to the words of Christ, your Redeemer, your Lord and your God. Behold, I came into the world not to call the righteous but sinners to repentance; the whole need no physician, but they that are sick; wherefore, little children are whole, for they are not capable of committing sin; wherefore the curse of Adam is taken from them in me, that it hath no power over them; and the law of circumcision is done away in me.

ດ ແລະ ພຣະວິນຍານບໍລິສຸດໄດ້ສະແດງພຣະຄຳຂອງພຣະເຈົ້າ ໃຫ້ປະຈັກແກ່ພໍ່ຕາມນີ້; ດັ່ງນັ້ນ, ລູກທີ່ຮັກຂອງພໍ່, ພໍ່ຮູ້ວ່າມັນ ເປັນການເຍາະເຍ้ຍພຣະເຈົ້າຢ່າງຮຸນແຮງທີ່ພວກລູກຈະໃຫ້ ບັບຕິສະມາແກ່ເດັກນ້ອຍໆ.

And after this manner did the Holy Ghost manifest the word of God unto me; wherefore, my beloved son, I know that it is solemn mockery before God, that ye should baptize little children.

ຕ ຈົ່ງເບິ່ງ ພໍ່ກ່າວກັບລູກว่า ລູກຈົ່ງສິດສອນເລື່ອງຕໍ່ໄປນີ້— ເຊັ່ນ ການກັບໃຈ ແລະ ການບັບຕິສະມາໃຫ້ຄົນທີ່ ຮູ້ຈັກ ຮັບຜິດຊອບ ແລະ ສາມາດເຮັດບາບໄດ້; ແທ້ຈິງແລ້ວ, ຈົ່ງສິດ ສອນຜູ້ເປັນບິດາມານດາວ່າ ພວກເຂົາຕ້ອງກັບໃຈ ແລະ ຮັບ ບັບຕິສະມາ, ແລະ ຖ່ອມຕົວຄືກັນກັບ ລູກນ້ອຍໆຂອງພວກ ເຂົາ, ແລ້ວພວກເຂົາຈະໄດ້ຮັບຄວາມລອດພ້ອມກັບລູກນ້ອຍໆ ຂອງພວກເຂົາທັງໝົດ.

And behold I say unto you that this thing shall ye teach—repentance and baptism unto those who are accountable and capable of committing sin; yea, teach parents that they must repent and be baptized, and humble themselves as their little children, and they shall all be saved with their little children.

ຕນ ແລະ ລູກນ້ອຍໆຂອງພວກເຂົາບໍ່ຕ້ອງການການກັບໃຈ ຫລື ຮັບບັບຕິສະມາ. ຈົ່ງເບິ່ງ, ການບັບຕິສະມາແມ່ນກະທຳໄວ້ກັບ ການກັບໃຈເພື່ອຈະເຮັດໃຫ້ພຣະບັນຍັດສຳເລັດ ອັນນຳໄປສູ່ ການປົດບາບ.

And their little children need no repentance, neither baptism. Behold, baptism is unto repentance to the fulfilling the commandments unto the remission of sins.

ຕສ ແຕ່ ເດັກນ້ອຍໆມີຊີວິດຢູ່ໃນພຣະຄຣິດ, ເຖິງແມ່ນຕັ້ງແຕ່ ການວາງຮາກຖານຂອງໂລກມາ; ຖ້າຫາກບໍ່ເປັນດັ່ງນັ້ນ, ພຣະເຈົ້າກໍຄົງເປັນພຣະເຈົ້າທີ່ບໍ່ຍຸດຕິທຳ, ແລະ ເປັນພຣະເຈົ້າທີ່ ປ່ຽນແປງຢູ່ສະເໝີ ແລະ ເລືອກໜ້າຄົນ; ເພາະວ່າມີເດັກນ້ອຍໆ ຈັກຄົນແລ້ວທີ່ຕາຍໄປໂດຍປາດສະຈາກການບັບຕິສະມາ!

But little children are alive in Christ, even from the foundation of the world; if not so, God is a partial God, and also a changeable God, and a respecter to persons; for how many little children have died without baptism!

ຕສ ດັ່ງນັ້ນ, ຖ້າຫາກເດັກນ້ອຍໆຈະລອດບໍ່ໄດ້ໂດຍປາດສະຈາກ ການບັບຕິສະມາ, ພວກເຂົາເຫລົ່ານັ້ນກໍຕ້ອງຕົກໄປສູ່ນະລົກ ອັນບໍ່ມີບ່ອນສິ້ນສຸດ.

Wherefore, if little children could not be saved without baptism, these must have gone to an endless hell.

ຕສ ຈົ່ງເບິ່ງ ພໍ່ກ່າວກັບລູກว่า, ຄົນທີ່ຄິດว่าເດັກນ້ອຍໆຕ້ອງໄດ້ ຮັບບັບຕິສະມາຍ່ອມຢູ່ໃນນ້ຳບີແຫ່ງຄວາມຂົມຂື່ນ ແລະ ໃນ ພັນທະການແຫ່ງຄວາມຊົ່ວຮ້າຍ; ເພາະເຂົາບໍ່ມີ ສັດທາ, ຄວາມ ຫວັງ, ຫລື ຄວາມໃຈບຸນເລີຍ; ດັ່ງນັ້ນ, ຖ້າຫາກເຂົາຖືກຕັດ ອອກໄປໃນຂະນະທີ່ຢູ່ໃນຄວາມຄິດນັ້ນ, ເຂົາຈະຕ້ອງຕົກໄປສູ່ນະ ລົກ.

Behold I say unto you, that he that supposeth that little children need baptism is in the gall of bitterness and in the bonds of iniquity; for he hath neither faith, hope, nor charity; wherefore, should he be cut off while in the thought, he must go down to hell.

ຕຫ ເພາະມັນເປັນຄວາມຊົ່ວຮ້າຍອັນເປັນຕາຢ້ານທີ່ຈະຄິດว่า ພຣະເຈົ້າຊ່ວຍເດັກນ້ອຍຄົນໜຶ່ງໃຫ້ໄດ້ຮັບຄວາມລອດເພາະ ການບັບຕິສະມາ, ແລະ ອີກຄົນໜຶ່ງຕ້ອງຕົກໄປສູ່ຄວາມອັບ ປະໂຫຍດຍ້ອນว่าບໍ່ໄດ້ຮັບບັບຕິສະມາ.

For awful is the wickedness to suppose that God saveth one child because of baptism, and the other must perish because he hath no baptism.

ຕຫ ວິບັດແກ່ຄົນທີ່ບິດເບືອນທາງຂອງພຣະຜູ້ເປັນເຈົ້າຕາມນີ້ ເພາະເຂົາຈະຕົກໄປສູ່ຄວາມອັບປະໂຫຍດຖ້າຫາກເຂົາບໍ່ກັບໃຈ. ຈົ່ງເບິ່ງ, ພໍ່ເວົ້າດ້ວຍຄວາມອາດຫານໂດຍມີ ສິດອຳນາດຈາກ ພຣະເຈົ້າ; ແລະ ພໍ່ບໍ່ມີຄວາມຢ້ານກົວຕໍ່ອຳນາດຂອງມະນຸດ; ເພາະ ຄວາມຮັກທີ່ສົມບູນຍ່ອມຂັບໄລ່ຄວາມຢ້ານກົວທັງໝົດ ອອກໄປ.

Wo be unto them that shall pervert the ways of the Lord after this manner, for they shall perish except they repent. Behold, I speak with boldness, having authority from God; and I fear not what man can do; for perfect love casteth out all fear.

ແລະ ພໍ່ເຕັມໄປດ້ວຍ ຄວາມໃຈບຸນ, ຊຶ່ງເປັນຄວາມຮັກອັນ
ເປັນນິດ; ດັ່ງນັ້ນ, ສຳລັບພໍ່ແລ້ວເດັກນ້ອຍທຸກຄົນເທົ່າທຽມກັນ
ໝົດ; ດັ່ງນັ້ນ, ພໍ່ຈຶ່ງຮັກ ເດັກນ້ອຍໆທຸກຄົນດ້ວຍຄວາມຮັກທີ່
ສົມບູນ; ແລະ ເຂົາເທົ່າທຽມກັນໝົດ ແລະ ເປັນຜູ້ມີສ່ວນໃນ
ຄວາມລອດ.

ເພາະພໍ່ຮູ້ວ່າ ພຣະເຈົ້າບໍ່ເປັນພຣະເຈົ້າທີ່ບໍ່ຍຸດຕິທຳ, ທັງບໍ່
ເປັນຜູ້ທີ່ປ່ຽນແປງຢູ່ສະເໝີ; ແຕ່ພຣະອົງຈະບໍ່ມີ ວັນປ່ຽນແປງ
ຈາກຊົ່ວນິລັນດອນເຖິງ ຊົ່ວນິລັນດອນ.

ເດັກນ້ອຍໆບໍ່ສາມາດກັບໃຈ; ດັ່ງນັ້ນ, ຈຶ່ງເປັນຄວາມຊົ່ວຮ້າຍ
ອັນເປັນຕາຢ້ານທີ່ຈະປະຕິເສດພຣະເມດຕາອັນບໍລິສຸດຂອງ
ພຣະເຈົ້າທີ່ພຣະອົງມີຕໍ່ເຂົາ, ເພາະເຂົາທັງໝົດມີຊີວິດຢູ່ໃນ
ພຣະອົງເພາະ ພຣະເມດຕາຂອງພຣະອົງ.

ແລະ ຄົນທີ່ເວົ້າວ່າເດັກນ້ອຍໆຕ້ອງຮັບບັບຕິສະມາຍ່ອມ
ປະຕິເສດພຣະເມດຕາຂອງພຣະຄຣິດ, ແລະ ຖືว່າ ການຊົດໃຊ້
ແລະ ອຳນາດແຫ່ງການໄຖ່ຂອງພຣະອົງບໍ່ມີຄ່າ.

ວິບັດແກ່ຄົນເຊັ່ນນັ້ນ, ເພາະເຂົາຢູ່ໃນຂັ້ນອັນຕະລາຍແຫ່ງ
ຄວາມຕາຍ, ນະລົກ, ແລະ ຄວາມທໍລະມານທີ່ ບໍ່ມີວັນສິ້ນສຸດ;
ພໍ່ເວົ້າເລື່ອງນີ້ຢ່າງອາດຫານ ເພາະພຣະເຈົ້າບັນຊາພໍ່ໃຫ້ເວົ້າ.
ຈົ່ງຟັງເລື່ອງເຫລົ່ານີ້ ແລະ ຈົ່ງເອົາໃຈໃສ່, ຖ້າບໍ່ດັ່ງນັ້ນ ມັນຈະ
ຢືນກ່າວໂທດລູກທີ່ ບັນລັງພິພາກສາຂອງພຣະຄຣິດ.

ເພາະຈົ່ງເບິ່ງ ເດັກນ້ອຍໆທຸກຄົນ ມີຊີວິດຢູ່ໃນພຣະຄຣິດ,
ແລະ ລວມທັງທຸກຄົນທີ່ຢູ່ໂດຍປາດສະຈາກ ກົດ. ເພາະວ່າ
ອຳນາດແຫ່ງ ການໄຖ່ມາເຖິງເຂົາທຸກຄົນທີ່ບໍ່ມີກົດ; ດັ່ງນັ້ນ,
ຄົນທີ່ບໍ່ຖືກກ່າວໂທດ, ຫລື ຄົນທີ່ບໍ່ຢູ່ພາຍໃຕ້ການກ່າວໂທດ
ຍ່ອມກັບໃຈບໍ່ໄດ້; ແລະ ການບັບຕິສະມາຈະບໍ່ມີຜົນປະໂຫຍດ
ຫຍັງເລີຍແກ່ຄົນເຫລົ່ານັ້ນ—

ແຕ່ວ່າມັນເປັນການເຍາະເຍີ້ຍພຣະເຈົ້າ, ເປັນການປະຕິເສດ
ພຣະເມດຕາຂອງພຣະຄຣິດ, ແລະ ອຳນາດຂອງພຣະວິນຍານ
ສັກສິດຂອງພຣະອົງ, ແລະ ເປັນການໃຫ້ຄວາມໄວ້ວາງใจໃນ
ວຽກງານທີ່ບໍ່ມີຄ່າ.

ຈົ່ງເບິ່ງ, ລູກຂອງພໍ່, ບໍ່ຄວນຈະໃຫ້ມີເລື່ອງເຊັ່ນນີ້ເກີດຂຶ້ນ
ເລີຍ; ເພາະ ການກັບໃຈແມ່ນສຳລັບຜູ້ທີ່ຝ່າຝືນກົດເຫລົ່ານັ້ນ.

ແລະ ຜົນທຳອິດຂອງ ການກັບໃຈຄື ການບັບຕິສະມາ; ແລະ
ການບັບຕິສະມາມາໂດຍສັດທາ ອັນນຳໄປສູ່ການເຮັດໃຫ້
ພຣະບັນຍັດສຳເລັດ; ແລະ ການເຮັດໃຫ້ພຣະບັນຍັດສຳເລັດ
ນຳມາຊຶ່ງ ການປົດບາບ.

And I am filled with charity, which is everlasting love; wherefore, all children are alike unto me; wherefore, I love little children with a perfect love; and they are all alike and partakers of salvation.

For I know that God is not a partial God, neither a changeable being; but he is unchangeable from all eternity to all eternity.

Little children cannot repent; wherefore, it is awful wickedness to deny the pure mercies of God unto them, for they are all alive in him because of his mercy.

And he that saith that little children need baptism denieth the mercies of Christ, and setteth at naught the atonement of him and the power of his redemption.

Wo unto such, for they are in danger of death, hell, and an endless torment. I speak it boldly; God hath commanded me. Listen unto them and give heed, or they stand against you at the judgment-seat of Christ.

For behold that all little children are alive in Christ, and also all they that are without the law. For the power of redemption cometh on all them that have no law; wherefore, he that is not condemned, or he that is under no condemnation, cannot repent; and unto such baptism availeth nothing—

But it is mockery before God, denying the mercies of Christ, and the power of his Holy Spirit, and putting trust in dead works.

Behold, my son, this thing ought not to be; for repentance is unto them that are under condemnation and under the curse of a broken law.

And the first fruits of repentance is baptism; and baptism cometh by faith unto the fulfilling the commandments; and the fulfilling the commandments bringeth remission of sins;

๘๗ ແລະ ການປົດບາບນຳມາຊຶ່ງ ຄວາມອ່ອນโยน, ແລະ ຄວາມ ຕ່ຳຕ້ອຍໃນໃຈ; ແລະ ເພາະຄວາມອ່ອນโยน ແລະ ຄວາມຕ່ຳ ຕ້ອຍໃນໃຈ ການມາຢ້ຽມຢາມຂອງ ພຣະວິນຍານບໍລິສຸດຍ່ອມ ມາເຖິງ ຊຶ່ງ ພຣະຜູ້ປອບโยน ເຮັດໃຫ້ເຕັມປ່ຽມໄປດ້ວຍ ຄວາມ ຫວັງ ແລະ ຄວາມຮັກທີ່ສົມບູນ, ຊຶ່ງຄວາມຮັກນັ້ນອົດທົນດ້ວຍ ຄວາມພາກພຽນຕໍ່ ການອະທິຖານຈົນທີ່ສຸດຈະມາເຖິງ, ເມື່ອ ໄພ່ພົນຂອງພຣະເຈົ້າທັງໝົດຈະໄດ້ຢູ່ກັບພຣະເຈົ້າ.

And the remission of sins bringeth meekness, and lowliness of heart; and because of meekness and lowliness of heart cometh the visitation of the Holy Ghost, which Comforter filleth with hope and perfect love, which love endureth by diligence unto prayer, until the end shall come, when all the saints shall dwell with God.

๘๘ ຈົ່ງເບິ່ງ, ລູກຂອງພໍ່, ພໍ່ຈະຂຽນຫາລູກອີກຖ້າຫາກພໍ່ບໍ່ໄດ້ ໄປຕໍ່ສູ້ກັບຊາວເລມັນໃນໄວໆນີ້. ຈົ່ງເບິ່ງ, ຄວາມທະນົງຕົວຂອງ ຊົນຊາດນີ້, ຫລື ຜູ້ຄົນຂອງຊາວນີໄຟປະກົດເປັນຄວາມພິນາດ ຂອງພວກເຂົາ ຖ້າຫາກພວກເຂົາບໍ່ກັບໃຈ.

Behold, my son, I will write unto you again if I go not out soon against the Lamanites. Behold, the pride of this nation, or the people of the Nephites, hath proven their destruction except they should repent.

๘๙ ຈົ່ງອະທິຖານເພື່ອພວກເຂົາ, ລູກຂອງພໍ່, ເພື່ອການກັບໃຈ ຈະມາເຖິງພວກເຂົາ. ແຕ່ຈົ່ງເບິ່ງ, ພໍ່ຢ້ານວ່າ ພຣະວິນຍານເລີກ ຄວາມພະຍາຍາມກັບພວກເຂົາ; ແລະ ຜູ້ຄົນໃນແຜ່ນດິນສ່ວນ ນີ້ກຳລັງພະຍາຍາມທຳລາຍອຳນາດ ແລະ ສິດອຳນາດທັງໝົດ ຊຶ່ງມາຈາກພຣະເຈົ້າ; ແລະ ພວກເຂົາກຳລັງ ປະຕິເສດ ພຣະວິນຍານບໍລິສຸດ.

Pray for them, my son, that repentance may come unto them. But behold, I fear lest the Spirit hath ceased striving with them; and in this part of the land they are also seeking to put down all power and authority which cometh from God; and they are denying the Holy Ghost.

๙๐ ແລະ ຫລັງຈາກທີ່ບໍ່ຍອມຮັບເອົາຄວາມຮູ້ອັນຍິ່ງໃຫຍ່ເຊັ່ນນີ້, ລູກຂອງພໍ່, ພວກເຂົາຈະຕ້ອງຕາຍໃນບໍ່ຊ້ານີ້, ແລ້ວຈະເຮັດໃຫ້ ຄຳທຳນາຍຊຶ່ງສາດສະດາທີ່ເວົ້າໄວ້ສຳເລັດ ເຊັ່ນດຽວກັນກັບ ພຣະຄຳຂອງພຣະຜູ້ຊ່ວຍໃຫ້ລອດເອງຂອງເຮົາ.

And after rejecting so great a knowledge, my son, they must perish soon, unto the fulfilling of the prophecies which were spoken by the prophets, as well as the words of our Savior himself.

๙๑ ລາກ່ອນ, ລູກຂອງພໍ່, ຈົນກວ່າພໍ່ຈະຂຽນຫາລູກອີກ, ຫລື ຈະພົບລູກອີກ. ອາແມນ.

Farewell, my son, until I shall write unto you, or shall meet you again. Amen.

ສານສະບັບທີສອງຂອງມໍມອນຫາໂມໂຣໄນລູກຊາຍຂອງເພິ່ນ.

ໂມໂຣໄນ ຈ

ᄀᄀ ລູກທີ່ຮັກຂອງພໍ່, ພໍ່ຂຽນເຖິງລູກອີກເພື່ອລູກຈະໄດ້ຮູ້ວ່າພໍ່ຍັງມີຊີວິດຢູ່; ແຕ່ພໍ່ໄດ້ຂຽນເລື່ອງທີ່ໜ້າໂສກເສົ້າແດ່ເລັກໜ້ອຍ.

ᄀᄁ ເພາະຈົ່ງເບິ່ງ, ພໍ່ໄດ້ທຳການສູ້ຮົບຢ່າງໜັກກັບຊາວເລມັນ, ຊຶ່ງໃນການສູ້ຮົບຄັ້ງນີ້ພວກເຮົາບໍ່ຊະນະພວກເຂົາ; ແລະ ອາຄີອານທັດໄດ້ຖືກຂ້າຕາຍແລ້ວ, ພ້ອມທັງລູຣັມ ແລະ ເອັມຣອນນຳອີກ; ແທ້ຈິງແລ້ວ, ແລະ ພວກເຮົາໄດ້ສູນເສຍຄົນທີ່ດີງຂອງພວກເຮົາໄປເປັນຈຳນວນຫລວງຫລາຍ.

ᄀᄂ ແລະ ບັດນີ້ຈົ່ງເບິ່ງ, ລູກຂອງພໍ່, ພໍ່ຢ້ານວ່າຊາວເລມັນຈະທຳລາຍຜູ້ຄົນພວກນີ້; ເພາະວ່າພວກເຂົາບໍ່ກັບໃຈ, ແລະ ຊາຕານໄດ້ຍຸຍົງພວກເຂົາໃຫ້ຜິດຖຽງກັນຢູ່ຕະຫລອດເວລາ.

ᄀᄃ ຈົ່ງເບິ່ງ, ພໍ່ໄດ້ທຳງານກັບພວກເຂົາຕະຫລອດໄປ; ແລະ ເມື່ອພໍ່ເວົ້າກັບພວກເຂົາດ້ວຍພຣະຄຳຂອງພຣະເຈົ້າຢ່າງ ຮຸນແຮງ ພວກເຂົາກໍຕົວສັ່ນ ແລະ ຄຽດແຄ້ນໃຫ້ພໍ່; ແລະ ເມື່ອພໍ່ເວົ້າກັບພວກເຂົາດ້ວຍຄຳເວົ້າທີ່ອ່ອນຫວານ ພວກເຂົາກໍເຮັດໃຈແຂງກະດ້າງຕໍ່ມັນ; ດັ່ງນັ້ນ, ພໍ່ຈຶ່ງຢ້ານວ່າພຣະວິນຍານຂອງພຣະຜູ້ເປັນເຈົ້າຈະເລີກ ພະຍາຍາມກັບພວກເຂົາແລ້ວ.

ᄀᄄ ເພາະພວກເຂົາຄຽດແຄ້ນທີ່ສຸດຈົນພໍ່ຮູ້ສຶກວ່າພວກເຂົາບໍ່ມີຄວາມຢ້ານກົວຕໍ່ຄວາມຕາຍເລີຍ; ແລະ ພວກເຂົາສູນເສຍຄວາມຮັກຂອງພວກເຂົາທີ່ມີຕໍ່ກັນ; ແລະ ພວກເຂົາ ກະຫາຍເລືອດ ແລະ ກ່ຳການແກ້ແຄ້ນກັນຢູ່ຕະຫລອດການ.

ᄀᄅ ແລະ ບັດນີ້, ລູກທີ່ຮັກຂອງພໍ່, ເຖິງແມ່ນວ່າພວກເຂົາຈະມີໃຈແຂງກະດ້າງຢູ່ກໍຕາມ, ຂໍໃຫ້ພວກເຮົາທຳງານ ຢ່າງພາກພຽນ; ເພາະຖ້າຫາກພວກເຮົາຢຸດ ທຳງານ, ພວກເຮົາກໍຈະຖືກນຳໄປຢູ່ພາຍໃຕ້ການກ່າວ�โทດ; ເພາະພວກເຮົາມີວຽກງານທີ່ຈະເຮັດ ເວລາພວກເຮົາຢູ່ໃນຮ່າງກາຍທີ່ເຮັດດ້ວຍດິນໜຽວນີ້, ເພື່ອ ພວກເຮົາຈະເອົາຊະນະສັດຕູຂອງຄວາມຊອບທຳທັງມວນ, ແລະ ພັກຜ່ອນຈິດວິນຍານຂອງພວກເຮົາໃນອານາຈັກຂອງ ພຣະເຈົ້າ.

ᄀᄆ ແລະ ບັດນີ້ພໍ່ຈະຂຽນບາງຢ່າງກ່ຽວກັບຄວາມທຸກທໍລະມານ ຂອງຜູ້ຄົນພວກນີ້. ເພາະຕາມທີ່ພໍ່ໄດ້ຍິນມາຈາກອາโมຣອນ, ຈົ່ງເບິ່ງ, ຊາວເລມັນມີຊະເລີຍເສີກຢ່າງຫລວງຫລາຍທີ່ເປັນ ຜູ້ຊາຍ, ຜູ້ຍິງ, ແລະ ເດັກນ້ອຍ, ຊຶ່ງພວກເຂົາໄດ້ມາຈາກຫໍສູງ ເຊີໄຣຊາ.

The second epistle of Mormon to his son Moroni.

Moroni 9

My beloved son, I write unto you again that ye may know that I am yet alive; but I write somewhat of that which is grievous.

For behold, I have had a sore battle with the Lamanites, in which we did not conquer; and Archeantus has fallen by the sword, and also Luram and Emron; yea, and we have lost a great number of our choice men.

And now behold, my son, I fear lest the Lamanites shall destroy this people; for they do not repent, and Satan stirreth them up continually to anger one with another.

Behold, I am laboring with them continually; and when I speak the word of God with sharpness they tremble and anger against me; and when I use no sharpness they harden their hearts against it; wherefore, I fear lest the Spirit of the Lord hath ceased striving with them.

For so exceedingly do they anger that it seemeth me that they have no fear of death; and they have lost their love, one towards another; and they thirst after blood and revenge continually.

And now, my beloved son, notwithstanding their hardness, let us labor diligently; for if we should cease to labor, we should be brought under condemnation; for we have a labor to perform whilst in this tabernacle of clay, that we may conquer the enemy of all righteousness, and rest our souls in the kingdom of God.

And now I write somewhat concerning the sufferings of this people. For according to the knowledge which I have received from Amoron, behold, the Lamanites have many prisoners, which they took from the tower of Sherrizah; and there were men, women, and children.

ᾳ ແລະ ພວກເຂົາໄດ້ຂ້າຜົວ ແລະ ພໍ່ຂອງພວກແມ່ຍິງ ແລະ ເດັກນ້ອຍເຫລົ່ານັ້ນ; ແລະ ພວກເຂົາໃຫ້ແມ່ຍິງກິນເນື້ອໜັງຜົວ ຂອງຕົນ, ແລະ ໃຫ້ເດັກນ້ອຍກິນເນື້ອໜັງພໍ່ຂອງຕົນ; ແລະ ບໍ່ ເອົານ້ຳໃຫ້ພວກເຂົາດື່ມ, ຖ້າໃຫ້ດື່ມ ກໍພຽງເລັກນ້ອຍເທົ່ານັ້ນ.

And the husbands and fathers of those women and children they have slain; and they feed the women upon the flesh of their husbands, and the children upon the flesh of their fathers; and no water, save a little, do they give unto them.

ᾳ ແລະ ເຖິງແມ່ນວ່າຊາວເລມັນຈະກະທຳສິ່ງທີ່ເປັນໜ້າ ກຽດຊັງອັນໃຫຍ່ຫລວງນີ້, ແຕ່ມັນກໍຍັງບໍ່ຮ້າຍແຮງໄປກວ່າ ຜູ້ຄົນຂອງພວກເຮົາຜູ້ຢູ່ໃນເມືອງໂມຣິອານທຳເລີຍ. ເພາະຈົ່ງ ເບິ່ງ, ພວກເຂົາໄດ້ເອົາລູກສາວຂອງຊາວເລມັນຫລາຍຄົນ ມາເປັນຊະເລີຍ; ແລະ ຫລັງຈາກເອົາສິ່ງອັນເປັນທີ່ຮັກ ແລະ ມີຄ່າທີ່ສຸດເໜືອກว่าທຸກສິ່ງໄປຈາກພວກນາງແລ້ວ, ຊຶ່ງຄື ພົມ ມະຈັນ ແລະ ຄວາມບໍລິສຸດ—

And notwithstanding this great abomination of the Lamanites, it doth not exceed that of our people in Moriantum. For behold, many of the daughters of the Lamanites have they taken prisoners; and after depriving them of that which was most dear and precious above all things, which is chastity and virtue—

ᾳ᾽ ແລະ ຫລັງຈາກພວກເຂົາກະທຳສິ່ງນີ້ແລ້ວ, ພວກເຂົາໄດ້ຂ້າ ພວກນາງດ້ວຍວິທີການທີ່ປ່າເຖື່ອນທີ່ສຸດ, ໂດຍທໍລະມານ ຮ່າງກາຍຂອງພວກນາງຈົນເຖິງແກ່ຄວາມຕາຍ; ແລະ ຫລັງຈາກເຮັດການນີ້ແລ້ວ, ພວກເຂົາກໍກິນເນື້ອໜັງຂອງພວກ ນາງເໝືອນກັບສັດປ່າ, ເພາະວ່າຄວາມແຂງກະດ້າງຂອງໃຈ ຂອງພວກເຂົາ; ແລະ ພວກເຂົາເຮັດໄປເພື່ອເປັນເຄື່ອງໝາຍ ຂອງຄວາມກ້າຫານ.

And after they had done this thing, they did murder them in a most cruel manner, torturing their bodies even unto death; and after they have done this, they devour their flesh like unto wild beasts, because of the hardness of their hearts; and they do it for a token of bravery.

ᾳᾳ ໂອ້ ລູກທີ່ຮັກຂອງພໍ່, ເປັນໄປໄດ້ແນວໃດທີ່ຜູ້ຄົນເຫລົ່ານີ້ ປາດສະຈາກຄວາມສີວິໄລ—

O my beloved son, how can a people like this, that are without civilization—

ᾳᾳ (ແລະ ພຽງສອງສາມປີຜ່ານມານີ້ ພວກເຂົາຍັງເປັນຄົນທີ່ ສຸພາບ ແລະ ໜ້າຊົມຢູ່)

(And only a few years have passed away, and they were a civil and a delightsome people)

ᾳᾳ᾽ ແຕ່ວ່າ ໂອ້ ລູກຂອງພໍ່, ເປັນໄປໄດ້ແນວໃດທີ່ຜູ້ຄົນເຫລົ່ານີ້ມີ ຄວາມເບີກບານຢູ່ກັບຄວາມໜ້າກຽດຊັງເຖິງຂະໜາດນີ້—

But O my son, how can a people like this, whose delight is in so much abomination—

ᾳᾳ᾽ ພວກເຮົາຈະຫວັງໄດ້ແນວໃດว่า ພຣະເຈົ້າຈະ ຢັບຢັ້ງພຣະ ຫັດໃນການພິພາກສາລົງໂທດພວກເຮົາ?

How can we expect that God will stay his hand in judgment against us?

ᾳᾳ᾽ ຈົ່ງເບິ່ງ, ໃຈຂອງພໍ່ຮ້ອງຂຶ້ນว่า: ວິບັດແກ່ຜູ້ຄົນພວກນີ້. ຂໍຈົ່ງ ໂປດອອກມາໃນການພິພາກສາເຖີດ, ໂອ້ ພຣະອົງເຈົ້າ, ຂໍຈົ່ງ ເຊື່ອງບາບ, ແລະ ຄວາມຊົ່ວຮ້າຍ, ແລະ ຄວາມໜ້າກຽດຊັງຂອງ ພວກເຂົາໃຫ້ພົ້ນຈາກພຣະພັກຂອງພຣະອົງເຖີດ!

Behold, my heart cries: Wo unto this people. Come out in judgment, O God, and hide their sins, and wickedness, and abominations from before thy face!

ᾳᾳ᾽ ແລະ ອີກຢ່າງໜຶ່ງ, ລູກຂອງພໍ່, ມີ ແມ່ໝ້າຍຫລາຍຄົນກັບ ລູກສາວຂອງພວກເຂົາທີ່ຍັງຢູ່ໃນເມືອງເຊີໄຣຊາ; ແລະ ສະບຽງ ອາຫານສ່ວນທີ່ຊາວເລມັນບໍ່ໄດ້ເອົາໄປນຳ, ຈົ່ງເບິ່ງ, ກອງທັບ ຂອງຊີເນໄຟໄດ້ເກັບເອົາໄປໝົດ, ແລະ ປະຖິ້ມໃຫ້ພວກເຂົາຊັດ ເຊພະເນຈອນໄປທຸກແຫ່ງຫົນເພື່ອຂອກຫາອາຫານ; ແລະ ຍິງ ຊະລາຫລາຍຄົນໄດ້ເປັນລົມຕາມທາງ ແລະ ຕາຍໄປ.

And again, my son, there are many widows and their daughters who remain in Sherrizah; and that part of the provisions which the Lamanites did not carry away, behold, the army of Zenephi has carried away, and left them to wander whithersoever they can for food; and many old women do faint by the way and die.

ຫ. ๑๗ ແລະ ກອງທັບຊຶ່ງຢູ່ກັບພໍ່ກໍອ່ອນກຳລັງ; ແລະ ກອງທັບ ຂອງຊາວເລມັນນັ້ນຢູ່ລະຫວ່າງເຊີໄຣຊາກັບພໍ່; ແລະ ມີຜູ້ຍິງ ຫລາຍຕໍ່ຫລາຍຄົນໜີໄປຫາກອງທັບຂອງ ອາໂຣນ ແລ້ວກໍຕົກ ເປັນຜູ້ຮັບເຄາະຂອງຄວາມປ່າເຖື່ອນອັນເປັນຕາຢ້ານຂອງພວກ ເຂົາ.

And the army which is with me is weak; and the armies of the Lamanites are betwixt Sherrizah and me; and as many as have fled to the army of Aaron have fallen victims to their awful brutality.

ຫ. ๑๘ ໂອ້ ຜູ້ຄົນຂອງພໍ່ຊ່າງມາຊົ່ວຮ້າຍແທ້ນໍ! ພວກເຂົາບໍ່ມີ ລະບຽບ ແລະ ບໍ່ມີຄວາມເມດຕາເລີຍ. ຈົ່ງເບິ່ງ, ພໍ່ເປັນພຽງແຕ່ ມະນຸດເທົ່ານັ້ນ, ແລະ ພໍ່ມີແຕ່ກຳລັງຂອງມະນຸດ, ແລະ ພໍ່ບໍ່ ສາມາດບັງຄັບໃຫ້ພວກເຂົາປະຕິບັດຕາມຄຳສັ່ງຂອງພໍ່ໄດ້ອີກ ຕໍ່ໄປ.

O the depravity of my people! They are without order and without mercy. Behold, I am but a man, and I have but the strength of a man, and I cannot any longer enforce my commands.

ຫ. ๑๙ ແລະ ພວກເຂົາກັບມາເຂັ້ມແຂງໃນຄວາມຊົ່ວຊ້າຂອງພວກ ເຂົາ; ແລະ ພວກເຂົາປ່າເຖື່ອນໂດຍບໍ່ຍົກເວັ້ນຜູ້ໃດ; ບໍ່ວ່າໜຸ່ມ ຫລື ແກ່; ແລະ ພວກເຂົາເບີກບານກັບທຸກສິ່ງທຸກຢ່າງ ນອກຈາກສິ່ງທີ່ດີ; ແລະ ຄວາມທຸກທໍລະມານຂອງພວກແມ່ຍິງ ແລະ ເດັກນ້ອຍຂອງພວກເຂົາທົ່ວຜືນແຜ່ນດິນນີ້ມີຫລາຍກວ່າ ທຸກສິ່ງ; ແທ້ຈິງແລ້ວ, ລີ້ນບອກບໍ່ໄດ້, ທັງຂຽນໄວ້ກໍບໍ່ໄດ້.

And they have become strong in their perversion; and they are alike brutal, sparing none, neither old nor young; and they delight in everything save that which is good; and the suffering of our women and our children upon all the face of this land doth exceed everything; yea, tongue cannot tell, neither can it be written.

ຫ. ๘๐ ແລະ ບັດນີ້, ລູກຂອງພໍ່, ພໍ່ຈະບໍ່ເວົ້າເຖິງສະພາບທີ່ໜ້າ ຢ້ານກົວນີ້ອີກຕໍ່ໄປ. ຈົ່ງເບິ່ງ, ລູກຮູ້ຈັກແລ້ວເຖິງຄວາມຊົ່ວຮ້າຍ ຂອງຜູ້ຄົນພວກນີ້; ລູກຮູ້ວ່າພວກເຂົາຢູ່ໂດຍປາດສະຈາກ ຫລັກການ, ແລະ ປາດສະຈາກຄວາມຮູ້ສຶກ; ແລະ ຄວາມ ຊົ່ວຮ້າຍຂອງພວກເຂົານັ້ນ ຮ້າຍແຮງກວ່າຊາວເລມັນ.

And now, my son, I dwell no longer upon this horrible scene. Behold, thou knowest the wickedness of this people; thou knowest that they are without principle, and past feeling; and their wickedness doth exceed that of the Lamanites.

ຫ. ๘๑ ຈົ່ງເບິ່ງ, ລູກຂອງພໍ່, ພໍ່ບໍ່ສາມາດອ້ອນວອນຫາພຣະເຈົ້າ ເພື່ອພວກເຂົາ ເພາະພໍ່ຢ້ານວ່າພຣະອົງຈະລົງโทດພໍ່.

Behold, my son, I cannot recommend them unto God lest he should smite me.

ຫ. ๘๘ ແຕ່ຈົ່ງເບິ່ງ, ລູກຂອງພໍ່, ພໍ່ໄດ້ອ້ອນວອນຫາພຣະເຈົ້າເພື່ອ ລູກ, ແລະ ພໍ່ໄວ້ວາງใจໃນພຣະຄຣິດວ່າ ລູກຈະລອດ; ແລະ ພໍ່ ອະທິຖານຫາພຣະເຈົ້າເພື່ອພຣະອົງຈະ ໄວ້ຊີວິດຂອງລູກ, ເພື່ອ ເບິ່ງຜູ້ຄົນຂອງພຣະອົງກັບມາຫາພຣະອົງ, ຫລື ໄປຫາຄວາມ ພິນາດທັງສິ້ນຂອງພວກເຂົາ; ເພາະພໍ່ຮູ້ວ່າ ພວກເຂົາຈະຕ້ອງ ຕາຍ ຖ້າຫາກພວກເຂົາບໍ່ ກັບໃຈ ແລະ ກັບມາຫາພຣະອົງ.

But behold, my son, I recommend thee unto God, and I trust in Christ that thou wilt be saved; and I pray unto God that he will spare thy life, to witness the return of his people unto him, or their utter destruction; for I know that they must perish except they repent and return unto him.

ຫ. ๘๗ ແລະ ຖ້າຫາກພວກເຂົາຕາຍໄປ ມັນຈະເປັນເໝືອນດັ່ງຊາວ ຢາເຣັດ, ເພາະຄວາມຈົງใจຂອງພວກເຂົາໃນ ການສະແຫວງ ຫາເລືອດ ແລະ ການແກ້ແຄ້ນ.

And if they perish it will be like unto the Jaredites, because of the wilfulness of their hearts, seeking for blood and revenge.

ຫ. ๘๘ ແລະ ຖ້າຫາກເປັນໄປວ່າພວກເຂົາຕາຍໄປ, ພວກເຮົາກໍຮູ້ວ່າ ພີ່ນ້ອງຂອງພວກເຮົາເປັນຈຳນວນຫລວງຫລາຍໄດ້ ແຕກໄປ ຫາຊາວເລມັນ, ແລະ ຜູ້ຄົນເປັນຈຳນວນຫລວງຫລາຍຕື່ມອີກ ທີ່ຈະແຕກໄປຫາພວກເຂົາ; ດັ່ງນັ້ນ ຈົ່ງຂຽນໄວ້ແຄ່ບາງເລື່ອງ ຖ້າຫາກລູກໄດ້ຮັບການຍົກເວັ້ນ ແລະ ພໍ່ຈະຕາຍໄປ ແລະ ບໍ່ ເຫັນລູກ; ແຕ່ພໍ່ວາງใจว่าพ่ำจะได้ເຫັນລູກໃນບໍ່ຊ້ານີ້; ເພາະພໍ່ ມີບັນທຶກສັກສິດທີ່ຢາກ ມອບໃຫ້ລູກ.

And if it so be that they perish, we know that many of our brethren have deserted over unto the Lamanites, and many more will also desert over unto them; wherefore, write somewhat a few things, if thou art spared and I shall perish and not see thee; but I trust that I may see thee soon; for I have sacred records that I would deliver up unto thee.

ຂ້ານ້ອຍ ຄ

ລ

ລ

ລ

ໂມໂຣໄນ ๑๐

๑ ບັດນີ້ຂ້າພະເຈົ້າໂມໂຣໄນຂຽນເລື່ອງທີ່ຂ້າພະເຈົ້າເຫັນວ່າດີໄວ້ແດ່; ແລະ ຂ້າພະເຈົ້າຂຽນເຖິງ ຊາວເລມັນ, ພີ່ນ້ອງຂອງ ຂ້າພະເຈົ້າ; ແລະ ຂ້າພະເຈົ້າຢາກໃຫ້ພວກເຂົາຮູ້ວ່າ ຫລາຍກວ່າ ສີ່ຮ້ອຍຊາວປີຜ່ານໄປແລ້ວ ນັບແຕ່ໄດ້ຮັບເຄື່ອງໝາຍຂອງການ ສະເດັດມາຂອງພຣະຄຣິດ.

๒ ແລະ ຂ້າພະເຈົ້າ ຜະນึกบันทึกนี้ไว้, ຫລັງຈາກທີ່ຂ້າພະເຈົ້າ ໄດ້ເວົ້າກັບທ່ານຈັກສອງສາມຄຳເປັນການແນະນຳທ່ານ.

๓ ຈົ່ງເບິ່ງ, ຂ້າພະເຈົ້າຂໍແນະນຳທ່ານວ່າ ເມື່ອທ່ານອ່ານເລື່ອງ ເຫລົ່ານີ້ ຖ້າມັນເປັນຄວາມສະຫລຽວສະຫລາດຂອງພຣະເຈົ້າ ວ່າທ່ານຄວນອ່ານມັນ, ໃຫ້ທ່ານຈື່ຈຳໄວ້ວ່າ ພຣະຜູ້ເປັນເຈົ້າ ເມດຕາລູກຫລານມະນຸດຫລາຍພຽງໃດ, ຕັ້ງແຕ່ການສ້າງ ອາດາມລົງມາຈົນເຖິງເວລາທີ່ທ່ານໄດ້ຮັບເລື່ອງເຫລົ່ານີ້, ແລະ ໄຕ່ຕອງເລື່ອງນີ້ຢູ່ໃນ ໃຈທ່ານ.

๔ ແລະ ເມື່ອທ່ານໄດ້ຮັບເລື່ອງເຫລົ່ານີ້ແລ້ວ, ຂ້າພະເຈົ້າຂໍ ແນະນຳທ່ານໃຫ້ ທູນຖາມພຣະເຈົ້າ, ພຣະບິດາຜູ້ສະຖິດ ນິລັນດອນໃນພຣະນາມຂອງພຣະຄຣິດ, ຖ້າຫາກເລື່ອງເຫລົ່ານີ້ ບໍ່ຈິງ; ແລະ ຖ້າຫາກທ່ານທູນຖາມດ້ວຍ ໃຈຈິງ, ດ້ວຍ ເຈດຕະນາ ອັນແທ້ຈິງ, ໂດຍມີ ສັດທາໃນພຣະຄຣິດ, ພຣະອົງຈະ ສະແດງ ຄວາມຈິງຂອງເລື່ອງນີ້ໃຫ້ປະຈັກແກ່ທ່ານ, ໂດຍ ອຳນາດຂອງພຣະວິນຍານບໍລິສຸດ.

๕ ແລະ ໂດຍອຳນາດຂອງພຣະວິນຍານບໍລິສຸດ ທ່ານຈະ ຮູ້ຈັກ ຄວາມຈິງຂອງທຸກເລື່ອງ.

๖ ແລະ ສິ່ງໃດກໍຕາມທີ່ດີຍ່ອມທ່ຽງທຳ ແລະ ເປັນຈິງ; ດັ່ງນັ້ນ, ບໍ່ມີສິ່ງໃດທີ່ດີຈະປະຕິເສດພຣະຄຣິດ, ແຕ່ຮັບວ່າພຣະອົງເປັນ ຢູ່.

๗ ແລະ ທ່ານຈະຮູ້ວ່າພຣະອົງເປັນຢູ່, ໂດຍອຳນາດຂອງ ພຣະວິນຍານບໍລິສຸດ; ດັ່ງນັ້ນ ຂ້າພະເຈົ້າຂໍແນະນຳທ່ານບໍ່ໃຫ້ ປະຕິເສດອຳນາດຂອງພຣະເຈົ້າ; ເພາະພຣະອົງທຳງານດ້ວຍ ອຳນາດ ຕາມສັດທາຂອງລູກຫລານມະນຸດ, ເຊັ່ນດຽວກັບມື້ນີ້ ແລະ ມື້ອື່ນ, ແລະ ຕະຫລອດການ.

๘ ແລະ ອີກຢ່າງໜຶ່ງ, ຂ້າພະເຈົ້າຂໍແນະນຳທ່ານ, ພີ່ນ້ອງຂອງ ຂ້າພະເຈົ້າ, ບໍ່ໃຫ້ປະຕິເສດຂອງ ປະທານຂອງພຣະເຈົ້າ, ເພາະ ມັນມີຢູ່ຢ່າງຫລວງຫລາຍ; ແລະ ມັນມາຈາກພຣະເຈົ້າອົງ ດຽວກັນ. ແລະ ມີວິທີ ຕ່າງໆທີ່ຈະໃຫ້ຂອງປະທານເຫລົ່ານີ້; ແຕ່ ເປັນພຣະເຈົ້າອົງດຽວກັນທີ່ທຳງານທັງໝົດທຸກຢ່າງ; ແລະ ປະທານຂອງເຫລົ່ານີ້ໃຫ້ມະນຸດໂດຍການສະແດງພຣະວິນຍານ ຂອງພຣະເຈົ້າໃຫ້ປະຈັກແກ່ມະນຸດ, ເພື່ອເປັນປະໂຫຍດແກ່ ພວກເຂົາ.

Moroni 10

Now I, Moroni, write somewhat as seemeth me good; and I write unto my brethren, the Lamanites; and I would that they should know that more than four hundred and twenty years have passed away since the sign was given of the coming of Christ.

And I seal up these records, after I have spoken a few words by way of exhortation unto you.

Behold, I would exhort you that when ye shall read these things, if it be wisdom in God that ye should read them, that ye would remember how merciful the Lord hath been unto the children of men, from the creation of Adam even down until the time that ye shall receive these things, and ponder it in your hearts.

And when ye shall receive these things, I would exhort you that ye would ask God, the Eternal Father, in the name of Christ, if these things are not true; and if ye shall ask with a sincere heart, with real intent, having faith in Christ, he will manifest the truth of it unto you, by the power of the Holy Ghost.

And by the power of the Holy Ghost ye may know the truth of all things.

And whatsoever thing is good is just and true; wherefore, nothing that is good denieth the Christ, but acknowledgeth that he is.

And ye may know that he is, by the power of the Holy Ghost; wherefore I would exhort you that ye deny not the power of God; for he worketh by power, according to the faith of the children of men, the same today and tomorrow, and forever.

And again, I exhort you, my brethren, that ye deny not the gifts of God, for they are many; and they come from the same God. And there are different ways that these gifts are administered; but it is the same God who worketh all in all; and they are given by the manifestations of the Spirit of God unto men, to profit them.

ຈ ເພາະຈົ່ງເບິ່ງ, ປະທານ ໃຫ້ຄົນໜຶ່ງໂດຍພຣະວິນຍານຂອງ ພຣະເຈົ້າ ເພື່ອເຂົາຈະ ສິດສອນຄຳແຫ່ງປັນຍາ;

For behold, to one is given by the Spirit of God, that he may teach the word of wisdom;

ຈ ແລະ ໃຫ້ອີກຄົນໜຶ່ງ ເພື່ອເຂົາຈະສິດສອນຄຳແຫ່ງຄວາມຮູ້ ໂດຍພຣະວິນຍານດຽວກັນ;

And to another, that he may teach the word of knowledge by the same Spirit;

ຈ ແລະ ໃຫ້ອີກຄົນໜຶ່ງມີ ສັດທາອັນໃຫຍ່ຍິ່ງ; ແລະ ໃຫ້ອີກຄົນ ໜຶ່ງ, ຂອງປະທານແຫ່ງ ການປິ່ນປົວໂດຍພຣະວິນຍານ ດຽວກັນ;

And to another, exceedingly great faith; and to another, the gifts of healing by the same Spirit;

ຈ ແລະ ອັນໜຶ່ງ, ໃຫ້ອີກຄົນໜຶ່ງ, ເພື່ອເຂົາຈະເຮັດ ສິ່ງ ມະຫັດສະຈັນອັນຍິ່ງໃຫຍ່;

And again, to another, that he may work mighty miracles;

ຈ ແລະ ອັນໜຶ່ງ, ໃຫ້ອີກຄົນໜຶ່ງ, ເພື່ອເຂົາຈະທຳນາຍກ່ຽວກັບ ທຸກສິ່ງ;

And again, to another, that he may prophesy concerning all things;

ຈ ແລະ ອັນໜຶ່ງ, ໃຫ້ອີກຄົນໜຶ່ງ, ການເຫັນທູດ ແລະ ວິນຍານ ທີ່ປະຕິບັດສາດສະໜາກິດ;

And again, to another, the beholding of angels and ministering spirits;

ຈ ແລະ ອັນໜຶ່ງ, ໃຫ້ອີກຄົນໜຶ່ງ, ພາສາທຸກພາສາ;

And again, to another, all kinds of tongues;

ຈ ແລະ ອັນໜຶ່ງ, ໃຫ້ອີກຄົນໜຶ່ງ, ການແປຄວາມໝາຍຂອງ ພາສາ ແລະ ພາສາຕ່າງໆ.

And again, to another, the interpretation of languages and of divers kinds of tongues.

ຈ ແລະ ຂອງປະທານທັງໝົດນີ້ມາໂດຍພຣະວິນຍານຂອງ ພຣະຄຣິດ; ແລະ ມັນມາສູ່ທຸກຄົນໄດ້ຕ່າງໆກັນຕາມທີ່ພຣະອົງ ພໍພຣະໄທ.

And all these gifts come by the Spirit of Christ; and they come unto every man severally, according as he will.

ຈ ແລະ ຂ້າພະເຈົ້າຂໍແນະນຳທ່ານ, ພີ່ນ້ອງທີ່ຮັກແພງຂອງ ຂ້າພະເຈົ້າ, ໃຫ້ທ່ານຈຳໄວ້ວ່າຂອງປະທານທີ່ດີ ທຸກຢ່າງ ມາຈາກພຣະຄຣິດ.

And I would exhort you, my beloved brethren, that ye remember that every good gift cometh of Christ.

ຈ ແລະ ຂ້າພະເຈົ້າຂໍແນະນຳທ່ານ, ພີ່ນ້ອງທີ່ຮັກແພງຂອງ ຂ້າພະເຈົ້າ, ໃຫ້ທ່ານຈຳໄວ້ວ່າ ພຣະອົງເປັນ ເໝືອນກັນເຊັ່ນມື້ ວານນີ້, ມື້ນີ້, ແລະ ຕະຫລອດການ, ແລະ ວ່າຂອງປະທານຊຶ່ງ ຂ້າພະເຈົ້າເວົ້າມາທັງໝົດນີ້, ຊຶ່ງເປັນທາງວິນຍານຈະບໍ່ໝົດໄປ ຈັກເທື່ອ, ຕາບໃດທີ່ໂລກຍັງຕັ້ງຢູ່, ນອກຈາກຈະເປັນໄປຕາມ ຄວາມບໍ່ເຊື່ອຖືຂອງລູກຫລານມະນຸດເທົ່ານັ້ນ.

And I would exhort you, my beloved brethren, that ye remember that he is the same yesterday, today, and forever, and that all these gifts of which I have spoken, which are spiritual, never will be done away, even as long as the world shall stand, only according to the unbelief of the children of men.

ຄ ດັ່ງນັ້ນ, ຈົ່ງຕ້ອງມີ ສັດທາ; ແລະ ຖ້າຫາກມີສັດທາກໍຕ້ອງມີ ຄວາມຫວັງເໝືອນກັນ; ແລະ ຖ້າຫາກມີຄວາມຫວັງກໍຕ້ອງມີ ຄວາມໃຈບຸນເໝືອນກັນ.

Wherefore, there must be faith; and if there must be faith there must also be hope; and if there must be hope there must also be charity.

ຄ ແລະ ຖ້າຫາກທ່ານບໍ່ມີ ຄວາມໃຈບຸນ ທ່ານຈະບໍ່ມີທາງລອດ ຢູ່ໃນອານາຈັກຂອງພຣະເຈົ້າ; ທັງທ່ານຈະລອດຢູ່ໃນອານາຈັກ ຂອງພຣະເຈົ້າບໍ່ໄດ້ຖ້າຫາກທ່ານບໍ່ມີສັດທາ; ທັງທ່ານຈະລອດ ບໍ່ໄດ້ຖ້າຫາກທ່ານບໍ່ມີຄວາມຫວັງ.

And except ye have charity ye can in nowise be saved in the kingdom of God; neither can ye be saved in the kingdom of God if ye have not faith; neither can ye if ye have no hope.

ຄ ແລະ ຖ້າຫາກທ່ານບໍ່ມີຄວາມຫວັງ ທ່ານກໍຈຳຕ້ອງຢູ່ໃນ ຄວາມໝົດຫວັງ; ແລະ ຄວາມໝົດຫວັງມາເຖິງເພາະຄວາມ ຊົ່ວຮ້າຍ.

And if ye have no hope ye must needs be in despair; and despair cometh because of iniquity.

๘๓ ແລະ ພຣະຄຣິດໄດ້ກ່າວກັບບັນພະບຸລຸດຂອງພວກເຮົາໄວ້ ແທ້ໆວ່າ: ຖ້າຫາກເຈົ້າມີສັດທາ ເຈົ້າຈະສາມາດເຮັດທຸກສິ່ງທີ່ ເຮົາເຫັນວ່າສົມຄວນ.

And Christ truly said unto our fathers: If ye have faith ye can do all things which are expedient unto me.

๘๔ ແລະ ບັດນີ້ຂ້າພະເຈົ້າຂໍເວົ້າກັບທີ່ສຸດຂອງແຜ່ນດິນໂລກ— ວ່າຖ້າຫາກມື້ນັ້ນມາເຖິງ ຊຶ່ງອຳນາດ ແລະ ຂອງປະທານຂອງ ພຣະເຈົ້າໝົດໄປໃນບັນດາພວກທ່ານ, ມັນກໍຈະເປັນ ເພາະ ຄວາມບໍ່ເຊື່ອຖື.

And now I speak unto all the ends of the earth— that if the day cometh that the power and gifts of God shall be done away among you, it shall be because of unbelief.

๘๕ ແລະ ວິບັດແກ່ລູກຫລານມະນຸດຖ້າຫາກມັນເປັນໄປເຊັ່ນນີ້; ເພາະວ່າຈະ ບໍ່ມີຜູ້ໃດເລີຍທີ່ເຮັດຄວາມດີໃນບັນດາພວກທ່ານ, ບໍ່ມີຈັກຄົນເລີຍ. ເພາະຖ້າຫາກເຖິງແມ່ນແຕ່ຄົນດຽວໃນບັນດາ ພວກທ່ານເຮັດຄວາມດີ, ເຂົາຄົນນັ້ນຈະທຳງານດ້ວຍອຳນາດ ແລະ ຂອງປະທານຂອງພຣະເຈົ້າ.

And wo be unto the children of men if this be the case; for there shall be none that doeth good among you, no not one. For if there be one among you that doeth good, he shall work by the power and gifts of God.

๘๖ ແລະ ວິບັດແກ່ຄົນທີ່ຈະເຮັດໃຫ້ສິ່ງເຫລົ່ານີ້ໝົດສິ້ນ ແລະ ຕາຍ, ເພາະເຂົາຍ່ອມ ຕາຍຢູ່ໃນ ບາບຂອງເຂົາ, ແລະ ເຂົາຈະ ລອດຢູ່ໃນອານາຈັກຂອງພຣະເຈົ້າບໍ່ໄດ້; ແລະ ຂ້າພະເຈົ້າເວົ້າ ເລື່ອງນີ້ຕາມພຣະຄຳຂອງພຣະຄຣິດ; ແລະ ຂ້າພະເຈົ້າບໍ່ໄດ້ເວົ້າ ຕົວະ.

And wo unto them who shall do these things away and die, for they die in their sins, and they cannot be saved in the kingdom of God; and I speak it according to the words of Christ; and I lie not.

๘๗ ແລະ ຂ້າພະເຈົ້າຂໍແນະນຳທ່ານໃຫ້ຈົດຈຳເລື່ອງເຫລົ່ານີ້; ເພາະເວລາຈະມາໂດຍໄວທີ່ທ່ານຈະຮູ້ວ່າ ຂ້າພະເຈົ້າບໍ່ໄດ້ເວົ້າ ຕົວະ, ເພາະທ່ານຈະເຫັນຂ້າພະເຈົ້າຢູ່ທີ່ບ່ອນພິພາກສາຂອງ ພຣະເຈົ້າ; ແລະ ອົງພຣະຜູ້ເປັນເຈົ້າຈະກ່າວກັບທ່ານວ່າ: ເຮົາບໍ່ ໄດ້ປະກາດ ຄຳຂອງເຮົາແກ່ເຈົ້າບໍ? ຊຶ່ງຊາຍຄົນນີ້ຂຽນໄວ້, ເໝືອນຄົນຕາຍ ຮ້ອງຂຶ້ນມາຈາກຄວາມຕາຍ, ແທ້ຈິງແລ້ວ, ແມ່ນດັ່ງຄົນຕາຍເວົ້າອອກມາຈາກ ຝຸ່ນດິນ?

And I exhort you to remember these things; for the time speedily cometh that ye shall know that I lie not, for ye shall see me at the bar of God; and the Lord God will say unto you: Did I not declare my words unto you, which were written by this man, like as one crying from the dead, yea, even as one speaking out of the dust?

๘๘ ຂ້າພະເຈົ້າປະກາດເລື່ອງເຫລົ່ານີ້ເພື່ອໃຫ້ຄຳທຳນາຍສຳເລັດ. ແລະ ຈົ່ງເບິ່ງ, ມັນຈະອອກຈາກພຣະໂອດຂອງພຣະເຈົ້າຜູ້ເປັນ ນິດ; ແລະ ພຣະຄຳຂອງພຣະອົງຈະ ອອກຈາກລຸ້ນສູ່ລຸ້ນ.

I declare these things unto the fulfilling of the prophecies. And behold, they shall proceed forth out of the mouth of the everlasting God; and his word shall hiss forth from generation to generation.

๘๙ ແລະ ພຣະເຈົ້າຈະສະແດງແກ່ທ່ານ, ว่าเลื่องซึ่งข้าพะเจ้า ຂຽນໄວ້ນັ້ນເປັນຄວາມຈິງ.

And God shall show unto you, that that which I have written is true.

๙๐ ແລະ ອີກຢ່າງໜຶ່ງ ຂ້າພະເຈົ້າຂໍແນະນຳທ່ານໃຫ້ ມາຫາ ພຣະຄຣິດ, ແລະ ຍຶດຖືຂອງປະທານທີ່ດີໄວ້ທຸກຢ່າງ, ແລະ ບໍ່ ແຕະຕ້ອງຂອງຊົ່ວ ຫລື ສິ່ງທີ່ບໍ່ສະອາດ.

And again I would exhort you that ye would come unto Christ, and lay hold upon every good gift, and touch not the evil gift, nor the unclean thing.

๙๑ ແລະ ຈົ່ງ ຕື່ນ, ແລະ ລຸກຂຶ້ນຈາກຝຸ່ນດິນເຖີດ, ໂອ້ ເຢຣູຊາເລັມ; ແທ້ຈິງແລ້ວ, ຈົ່ງສວມອາພອນສວຍງາມເຖີດ, ໂອ້ ທິດາຂອງ ຊີໂອນ; ແລະ ຈົ່ງເຮັດໃຫ້ ຫລັກຂອງທ່ານ ແຂງແຮງ ແລະ ຂະຫຍາຍເຂດຂອງທ່ານຕະຫລອດການ, ເພື່ອທ່ານຈະ ບໍ່ ສັບສົນອີກຕໍ່ໄປ, ເພື່ອພັນທະສັນຍາຂອງພຣະບິດາຜູ້ສະຖິດ ນິລັນດອນ ຊຶ່ງໄດ້ເຮັດໄວ້ກັບທ່ານຈະສຳເລັດ, ໂອ້ ເຊື້ອສາຍ ອິດສະຣາເອນ.

And awake, and arise from the dust, O Jerusalem; yea, and put on thy beautiful garments, O daughter of Zion; and strengthen thy stakes and enlarge thy borders forever, that thou mayest no more be confounded, that the covenants of the Eternal Father which he hath made unto thee, O house of Israel, may be fulfilled.

ມ٥ ແທ້ຈິງແລ້ວ, ຈົ່ງ ມາຫາພຣະຄຣິດ, ແລະ ຖືກເຮັດໃຫ້ເປັນ ຄົນດີພ້ອມໃນພຣະອົງ, ແລະ ປະຕິເສດຕົນຈາກຄວາມບໍ່ເປັນ ເໝືອນດັ່ງພຣະເຈົ້າທຸກຢ່າງ; ແລະ ຖ້າຫາກທ່ານປະຕິເສດຕົນ ຈາກຄວາມບໍ່ເປັນເໝືອນດັ່ງພຣະເຈົ້າທຸກຢ່າງ, ແລະ ຮັກ ພຣະເຈົ້າດ້ວຍສຸດພະລັງ, ຄວາມນຶກຄິດ, ແລະ ກຳລັງຂອງ ທ່ານ, ເມື່ອນັ້ນພຣະຄຸນຂອງພຣະອົງຈົ່ງພຽງພໍສຳລັບທ່ານ, ເພື່ອໂດຍພຣະຄຸນຂອງພຣະອົງ, ທ່ານຈະດີພ້ອມໃນພຣະຄຣິດ; ແລະ ຖ້າຫາກໂດຍ ພຣະຄຸນຂອງພຣະເຈົ້າທ່ານດີພ້ອມໃນ ພຣະຄຣິດ, ທ່ານຍ່ອມບໍ່ມີທາງປະຕິເສດອຳນາດຂອງພຣະເຈົ້າ ໄດ້ເລີຍ.

Yea, come unto Christ, and be perfected in him, and deny yourselves of all ungodliness; and if ye shall deny yourselves of all ungodliness, and love God with all your might, mind and strength, then is his grace sufficient for you, that by his grace ye may be perfect in Christ; and if by the grace of God ye are perfect in Christ, ye can in nowise deny the power of God.

ມ٥ ມ ແລະ ອີກຢ່າງໜຶ່ງ, ຖ້າຫາກໂດຍພຣະຄຸນຂອງພຣະເຈົ້າ ທ່ານດີພ້ອມໃນພຣະຄຣິດ, ແລະ ບໍ່ປະຕິເສດອຳນາດຂອງ ພຣະອົງ, ເມື່ອນັ້ນທ່ານຍ່ອມໄດ້ຮັບ ການຊຳລະໃຫ້ບໍລິສຸດໃນ ພຣະຄຣິດ ໂດຍພຣະຄຸນຂອງພຣະເຈົ້າ, ໂດຍທາງການຫລັ່ງ ໂລຫິດຂອງພຣະຄຣິດ, ຊຶ່ງມີຢູ່ໃນພັນທະສັນຍາຂອງພຣະບິດາ ອັນນຳໄປສູ່ ການປົດບາບຂອງທ່ານ, ເພື່ອທ່ານຈະກາຍມາເປັນ ຜູ້ບໍລິສຸດ, ປາດສະຈາກມົນທິນ.

And again, if ye by the grace of God are perfect in Christ, and deny not his power, then are ye sanctified in Christ by the grace of God, through the shedding of the blood of Christ, which is in the covenant of the Father unto the remission of your sins, that ye become holy, without spot.

ມ٥ ๔ ແລະ ບັດນີ້ຂ້າພະເຈົ້າຂໍກ່າວຄຳອຳລາຕໍ່ທຸກຄົນ. ໃນບໍ່ຊ້ານີ້ ຂ້າພະເຈົ້າຈະໄປ ພັກຢູ່ໃນ ທີ່ສຸຂະເສີມຂອງພຣະເຈົ້າ, ຈົນກວ່າ ວິນຍານ ແລະ ຮ່າງກາຍຂອງຂ້າພະເຈົ້າຈະ ເຂົ້າຮ່ວມກັນອີກ, ແລະ ຂ້າພະເຈົ້າຈະຖືກນຳອອກມາດ້ວຍໄຊຊະນະທາງ ອາກາດ, ເພື່ອມາພົບທ່ານຕໍ່ໜ້າບ່ອນພິພາກສາອັນໜ້າ ພໍພຣະໄທ ຂອງ ພຣະເຢໂຮວາຜູ້ຍິ່ງໃຫຍ່, ຜູ້ພິພາກສາຜູ້ສະຖິດ ນິລັນດອນຂອງທັງຄົນເປັນ ແລະ ຄົນຕາຍ. ອາແມນ.

And now I bid unto all, farewell. I soon go to rest in the paradise of God, until my spirit and body shall again reunite, and I am brought forth triumphant through the air, to meet you before the pleasing bar of the great Jehovah, the Eternal Judge of both quick and dead. Amen.

ຈົບ

The End